ເຢ. ໂກເບເລັບ

ໂຮ່ຈິມິນ

ບຸນສິ່ງ ແກ້ວບົວສາຍ
ສ. ສາຍ..

"ທຸກບາດກ້າວເດີນຂອງປະຊາຊົນເຮົາ ແລະ ພັກເຮົາ ໃນ ໔໐ ປີຜ່ານມາລ້ວນແຕ່ຕິດພັນກັບການເຄື່ອນໄຫວປະຕິວັດອັນຟົດຟື້ນທີ່ສຸດ ແລະ ຈົບງາມຂອງປະທານໂຮ່ຈີມິນ. ຊີວິດທັງໝົດຂອງເພິ່ນ ທີ່ອຸທິດໃຫ້ແກ່ພາລະກິດຕໍ່ສູ້ຂອງປະຊາຊົນເຮົາ ແລະພັກເຮົາຢ່າງເຕັມປ່ຽມແມ່ນວິລະກຳອັນອະມະຕະ ທີ່ເປັນກຽດໃຫ້ແກ່ການປະຕິວັດຂອງຫວຽດນາມ".

ເລຍ່ວນ ເລຂາທິການໃຫຍ່ ຄະນະບໍລິຫານງານ
ສູນກາງ ພັກກອມມູນິດ ຫວຽດນາມ

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸນມີ

("ການປະຕິວັດຫວຽດນາມ", ປີ໑໙໗໐)

0 1 JAN 2009

ບຸນລ້ຽງ ແກ້ວບົວສາຍ
ສ. ສາຍບຸນມີ

ເຢ. ໂກເບເລັບ

ໂຣ່ຈິມິນ

ບຸນລ້ຽງ ແກ້ວບົວສາຍ
ສ. ສາຍບຸນມີ

ສຳນັກພິມ "ກ້າວໜ້າ"
ມົດສະກູ
1989

ແປໂດຍ: ເຫລົາ ເພັດຈຳພອນ
ຮຽບຮຽງໂດຍ: ວົງເດືອນ ຈັນທະວິສູກ

Е. Кобелев
Хо Ши Мин
на лаосском языке

©Молодая гвардия, 1983
©ແປເປັນພາສາລາວໂດຍສຳນັກພິມ "ກ້າວໜ້າ", 1989

К $\frac{4700000000-155}{014(01)-89}$ без объявл.

ISBN 5-01-001543-9

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸນມີ

"ພວກຂ້ອຍ ແມ່ນຄົນພື້ນຖານ ເງ່ອານ !"

ໃນຊຸມປີທີ່ປະຊາຊົນຫວຽດນາມ ດຳເນີນການຕໍ່ສູ້ຢ່າງພິລະອາດຫານ ຕ້ານພວກຈັກກະພັດອາເມລິກາຜູ້ຮຸກຮານ, ຂ້ອຍຜູ້ຂຽນປຶ້ມເຫລັ້ມນີ້ ໄດ້ໄປປະຕິບັດງານຢູ່ຫວຽດນາມໃນຖານະເປັນນັກຂ່າວຂອງສຳນັກຂ່າວສານໂຊວຽດ (ຕາສ). ອາດເວົ້າໄດ້ວ່າ ໃນຊຸມມື້ຂອງເດືອນ ມິຖຸນາ ປີ ໑໙໖໘, ໃນໄລຍະທີ່ຂ້ອຍ ພັກພາອາໄສ ຢູ່ບົນດາເຂດແຂວງພາກໃຕ້ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມເປັນມື້ທີ່ຂ້ອຍຈົດຈຳໄວ້ເປັນພິເສດ.

ສົງຄາມໄດ້ກ້າວເຂົ້າມາເປັນເດືອນທີສາມແລ້ວ, ຄວັນໄຟສີດຳເປັນກ້ອນເປັນໂງ່ນທີ່ເກີດຈາກໄຟໄຫມ້ປິ້ວຂຶ້ນສູ່ທ້ອງຟ້າສີຄາມ. ລົດ "ຈິບ" ນັກຂ່າວຂອງພວກຂ້ອຍ ຖືກຫຸ້ມດ້ວຍຕາໜ່າງ ແລະ ແຊມດ້ວຍໃບກ້ວຍທີ່ປິວສະບັດຕາມສາຍລົມ, ລົດພວກຂ້ອຍແລ່ນລ໋ວງໆໄປຕາມທາງລັດ ທີ່ມຸ່ງຫນ້າລົງສູ່ພາກໃຕ້. ຢູ່ເທິງທ້ອງຟ້າ ສຽງກ້ອງຂອງເຮືອບິນຖິ້ມລະເບີດອາເມລິກາດັງຂຶ້ນຊູ່ຢ່າງບໍ່ມີຍາມຢຸດເຊົາ.

ເສັ້ນທາງທີ່ເດຍລະດາດໄປດ້ວຍຂຸມຫມາກແຕກຫມາກບົມນຳໄປສູ່ຂົວຟູ ທີ່ເຮັດດ້ວຍໄມ້ໄຜ່ ແລະ ທີ່ເນັ່ງຂ້າມແມ່ນ້ຳສາຍຕ່າງໆ ຊຶ່ງມີນ້ຳຍັງຂຶ້ນເຕັມຝັ່ງ. ຢູ່ແຫ່ງນີ້, ທຸກຈຸດເລີ່ມເຄື່ອນໄຫວເມື່ອຄວາມມືດພວມຄືບຄານເຂົ້າມາ. ຂ້ອຍຫວນຄືນ ເຖິງເວລານາທີອັນຫນັກຫນ່ວງ, ອິດເມື່ອຍຍ້ອນໄດ້ປີນຂາຊຸລຸຖາຂົວຟູ ທີ່ບໍ່ອາດແມນເຫັນໄດ້. ຢູ່ທີ່ທ່າເຮືອ, ມີການລົງຕະຫລາດຍາມກາງຄືນ. ແສງໄຟຕະກຽງນ້ຳມັນກາດ ແຈ່ງພໍເປັນ

ຣິບຣື່ພໍໄດ້ເຫັນໃບໜ້າກ່ຳແດດຂອງບັນດາແມ່ປ້າທີ່ນັ່ງຂາຍເຄື່ອງເຊັ່ນ: ໝາກກ້ວຍ , ໝາກພ້າວ, ໝາກລິ້ນຈີ່, ກະປູທະເລໄຕ່ຄວາກໆຄືກໆຢ່າງບໍ່ເປັນລະບຽບຢູ່ເທິງ ກະແຕະທີ່ວາງໄວ້ເທິງໜ້າດິນ. ຄົນຊຸກແມ່ນແຂກເດີນທາງຜ່ານມາແຖບນີ້ຄືພວກຂ້ອຍ ນັ້ນລະ, ພວກເຂົາເຍືອງໄຟສາຍ ແລະ ເວົ້າສຽງຄ່ອຍໆຕໍ່ລາຄາຄືຄົນມີຄວາມຜິດຊັ້ນລະ. ຢູ່ຟາກແມ່ນ້ຳເບື້ອງນັ້ນ ຫ່າງຈາກບ່ອນນີ້ໄປປະມານສອງສາມກິໂລແມັດ ແມ່ນນະຄອນວິນ ຊຶ່ງເປັນເມືອງເອກຂອງແຂວງ ເງອານ. ຢູ່ແຫ່ງນັ້ນ ພັດຍັງໄດ້ຍິນສຽງປືນຕໍ່ຕ້ານອາກາດດັງເປັນຄັ້ງຄາວ, ລູກລະເບີດແຜດສຽງສະໜັ່ນທ້ອງຟ້າ ລຸກເປັນໄຟ ຄືດັ່ງວ່າຈະເຜົາໄໝ້ໂລກມະນຸດ.

ຍັງອີກສອງສາມກິໂລແມັດເທົ່ານັ້ນ ແຕ່ພວກຂ້ອຍກໍ່ຕ້ອງເສຍເວລາເດີນທາງ ທັງຄືນ. ຈົນມາຮອດເວລາໃກ້ຈະຮຸ່ງແຈ້ງ ເມື່ອລັດສະໝີຄວາມຮ້ອນທຳອິດ ຂອງດວງຕາເວັນເດືອນມິຖຸນາ ໄດ້ສາດແສງລົງໜ້າດິນ ລົດຂອງພວກຂ້ອຍຈຶ່ງແລ່ນຮອດນະຄອນວິນ. ນະຄອນເປົ່າປ່ຽວງຽບສະຫງັດຕ້ອນຮັບພວກຂ້ອຍດ້ວຍສຽງສັນຍານໄຟທາງອາກາດ ອັນໄດ້ເຮັດໃຫ້ຄົນຍ້ານອົກສັ່ນຂວັນຫາຍ ແລະ ສຽງດັ່ງກ່າວກໍ່ດັງລຽນຕິດບໍ່ຂາດໄລຍະ ຈົນຮອດຕາເວັນຕົກດິນ. ແຕ່ຄາວຍັງຢູ່ຮ່າໂນ້ຍພຸ້ນ ພວກຂ້ອຍໄດ້ຍິນຫລາຍໆເທື່ອ ກ່ຽວກັບເລື່ອງວ່າ ນະຄອນວິນ ຖືກເຮືອບິນອາເມລິກາຖິ້ມລະເບີດທຳລາຍຢ່າງຄຸເດືອດ ແຕ່ກໍ່ຍັງວາດພາບບໍ່ຖືກຊັດເຈນເທົ່າກັບເມື່ອເວລາຕົນເອງໄດ້ມາເຫັນກັບຕາ ຄືເມື່ອເວລາທີ່ຢ່ວງບາດຕີນກ້າວທຳອິດເຂົ້າໃນດິນແດນຂອງນະຄອນແຫ່ງນີ້. ສຽງປືນຕໍ່ຕ້ານ ອາກາດດັງສະໜັ່ນຫວັ່ນໄຫວແຫກຟ້າແສບເຂົ້າເຈ້ຍຫູຈົນບໍ່ອາດຈະໄດ້ຍິນສຽງຄົນເວົ້າຢູ່ອ້ອມຕົວ. ຄວັນໝື້ສີຂາວເປັນໂງ່ນເປັນກ້ອນກ່ຽວກອດກັນປິ້ວຂຶ້ນສູ່ທ້ອງຟ້າ. ສຽງລູກລະເບີດ ຕົກລົງສູ່ພື້ນດິນດັງສະໜັ່ນປານແຜ່ນດິນຈະຖະຫລົ່ມມັນສົ່ງສຽງກ້ອງສັ່ນສະເທືອນຄືວ່າກົດຄົນຜູ້ໜຶ່ງ ໃຫ້ຈົມລົງພື້ນດິນ. ບັນດາຝູງເຮືອບິນຖິ້ມລະເບີດ ຂອງອາເມລິກາ ທີ່ບິນຈາກກ້ຳອ່າວຕົງແກງ ພາກັນມຸ່ງໜ້າໄປສູ່ນະຄອນວິນ ເປັນຄື້ນໆຕໍ່ໆກັນ.

ຕອນທ່ຽງຄືນ ໃນຂະນະທີ່ພວກຂ້ອຍເດີນໄປຕາມທາງນ້ອຍມືດຕຶບທີ່ເນັ່ງຜ່ານທົ່ງນາເພື່ອໃຫ້ໄປຮອດທີ່ພັກຊຶ່ງຕັ້ງຢູ່ບ້ານນ້ອຍແຫ່ງໜຶ່ງ ຢູ່ນອກເມືອງ ພວກຂ້ອຍ ອິດເມື່ອຍເກືອບຕາຍ, ຫລົ້ນຫລາຍຍ້ອນຄວາມຮ້ອນເຕັມຂີດສູງເຖິງສີ່ສິບອົງສາ ແລະ ຍ້ອນມີຄວາມຮູ້ສຶກຖືກກົດດັນເຄັ່ງຕຶງຢູ່ພໍສຳນັ້ນ, ມີຄົນຜູ້ໜຶ່ງບໍ່ຮູ້ຊື່ ໄດ້ຖາມຄົນພາທາງ ພວກຂ້ອຍ ຊຶ່ງແທ້ຈິງແລ້ວລາວເປັນນັກຮົບຄົນໜຶ່ງຂອງກອງຫລອນປະຊາຊົນ ວ່າເຮັດແນວ

ໃດປະຊາຊົນຢູ່ບ່ອນນີ້ຈຶ່ງສາມາດສູ້ທົນໄດ້ຕໍ່ສະພາວະການດັ່ງກ່າວໝົດຈາກມື້ນີ້ຕໍ່ໃສ່ມື້ອື່ນ ຢູ່ພໍສຳນັ້ນ. ຊາຍໜຸ່ມຍິ້ມ ແລ້ວຈຶ່ງເວົ້າເຄິ່ງຫລິ້ນເຄິ່ງອິຫລີວ່າ: "ພວກຂ້ອຍ ແມ່ນຄົນພື້ນຖານເງ່ອານ !" ໃນເວລາຕໍ່ໆມາ ແຕ່ລະຄັ້ງທີ່ມີວຽກງານຕ້ອງໄດ້ມາເຂດນີ້ ບໍ່ວ່າຈະຢູ່ໃນສະພາບໃດກໍຕາມ ຂ້ອຍກໍມັກຈະໄດ້ຍິນຄຳເວົ້າດັ່ງກ່າວນີ້ຢູ່ເລື້ອຍໆ. ມັນເປັນຄວາມເວົ້າອັນທະນົງໃຈທີ່ສຸດ: ຄຳວ່າ "ພວກຂ້ອຍແມ່ນຄົນພື້ນຖານ ເງອານ" ຈະຊອດແຊກເຂົ້າໃນເລື່ອງລາວຂອງປະຊາຊົນທ້ອງຖິ່ນ ເວລາພວກເຂົາເຈົ້າເວົ້າກ່ຽວກັບໄຊຊະນະໃໝ່ໃນການຕີຊະນະເຮືອບິນຂ້າເສິກອາເມລິກາ, ກ່ຽວກັບຜົນເກັບກ່ຽວໃໝ່ທີ່ລື່ນລະດັບຄາດໝາຍ, ກ່ຽວກັບບົດກອນທີ່ມ່ວນອອນຊອນຂອງນັກກະວີໜຸ່ມ ຄົນໜຶ່ງຂອງທ້ອງຖິ່ນທີ່ໄດ້ພັນລະນາຊົມເຊີຍປະຊາຊົນພາກໃຕ້ຮ່ວມທ້ອງດຽວກັນ, ກ່ຽວກັບເພງທີ່ບັນດາກອງຫລອນປະຊາຊົນເພດຍິງຮ້ອງດັງກ້ອງກັງວານຢູ່ບົນສະໜາມຮົບ ຂອງກອງພົນຕໍ່ຕ້ານອາກາດກອງໃດຫອງໜຶ່ງທີ່ຊ່ອນຕົວຢູ່ກ້ອງຕົ້ນກ້ວຍຂຽວງາມຊຸ່ມໜຸ່ມ.

ຢູ່ເຂດນີ້ ມີຫຍັງພິເສດກວ່າໝູ່ແດ່ ປະຊາຊົນທ້ອງຖິ່ນນີ້ຈຶ່ງທະນົງໃຈເຖິງພຽງນີ້? ຢູ່ນີ້ບໍ່ອາດຈະມອງເຫັນຄວາມງາມອັນແປກປະຫລາດຂອງອ່າວຮ່າລອງ ຊຶ່ງເປັນ "ສິ່ງມະຫັດສະຈັນອັນດັບແປດຂອງໂລກ" ແລະ ບໍ່ມີທັດສະນີຍະພາບອັນສວຍງາມ ຂອງພູຜາປ່າດົງແຫ່ງໃດເທົ່າກັບພາກເໜືອຫວຽດນາມ ຫລືບໍ່ກໍຢູ່ເຂດພູພຽງ ໄຕງວຽນ ທີ່ມີ ຖ້ຳເລິກ ແລະ ນ້ຳຕົກຕາດທີ່ໄຫລ ແຮງນັບເປັນຮ້ອຍໆແຫ່ງ. ຂະນະດຽວກັນ ກໍບໍ່ມີ ໂອກາດໄດ້ເຫັນອ່າວ ແລະ ຊາຍຫາດທີ່ທຳມະຊາດສ້າງຂຶ້ນເອງຢ່າງສວຍງາມ ແລະແປກປະຫລາດ ຄືຢູ່ທີ່ການແຮງ ແລະ ຍາຈາງ. ກົງກັນຂ້າມ ນັບຕັ້ງແຕ່ສະໄໝບູຮານ ພຸ້ນປະຊາຊົນຖືວ່າແຂວງ ເງ່ອານ ເປັນບ່ອນທີ່ມີຊື່ສຽງບໍ່ດີ ຍ້ອນວ່າເຂດນີ້ເປັນເຂດ "ດົງດິບ" ທີ່ຜີບໍ່ທ່ອງຄົນບໍ່ຫຽວ ຢູ່ຕົ້ນສາຍພູຫລວງ ທັງເປັນເຂດທີ່ມີສັດປ່າຫລວງຫລາຍ, ງູ, ແລະ ແມງໄມ້ທີ່ມີພິດ; ຍ້ອນຜົນຮ້າຍເກີດຈາກລົມຮ້ອນຊຶ່ງພັດມາຈາກລາວ, ແມ່ນ ລົມລະດູແລ້ງທີ່ພາໃຫ້ເກີດມີດິນແຫ້ງກະແດ້ງ, ຕົ້ນຫຍ້າ, ຕົ້ນໄມ້ຫ່ຽວແຫ້ງ, ຄົນແລະ ສັດປ່າຫາຍໃຈຝືດ. ສ່ວນລົມພາຍຸອັນໂຫດຮ້າຍຕໍ່ຊີວິດຂອງຄົນກໍມັກພັດເຂົ້າມາໃນເຂດນີ້ລະຢູ່ໃນນິທານຂອງຄົນເຜົ່າມົ້ງທີ່ດຳລົງຊີວິດຢູ່ຕາມເຂດພູດອຍ ເງ່ອານ ມີເລື່ອງເລົ່າ ກັນກ່ຽວກັບຄືນລົມພະຍຸ, ລົມຫົວກຸດຫົວຂາດທີ່ຊຸ້ມເອົາຄົນ ແລະ ຝູງສັດປິວຂຶ້ນຟ້າແລະຍ້າຍພູໄດ້ພູ້ນລະ. ຍິ່ງກວ່ານັ້ນ ທຳມະຊາດບໍ່ໄດ້ປະທານດິນອຸດົມສົມບູນສະດວກແກ່ການ ປູກຝັງ ໃຫ້ແກ່ຫວຽດນາມພາກກາງ ສະນັ້ນ ປະຊາຊົນທີ່ຢູ່ບ່ອນນີ້ບໍ່ວ່າໃນເວລາໃດກໍດຳລົງ

ຊີວິດຢູ່ໃນຄວາມອຶດຫິວ ແລະ ທຸກຍາກລຳບາກ.

ແຜ່ນດິນຕອນນີ້ ບໍ່ມີຊື່ສຽງດ້ານຄວາມງາມ ແລະ ຄວາມອຸດົມຮັ່ງມີຂອງທຳມະຊາດ ແຕ່ຫາກວ່າຄົນທີ່ອາໄສຢູ່ເທິງແຜ່ນດິນຕອນນີ້ ມີແຕ່ຄົນທີ່ມີນ້ຳໃຈແຂງແກ່ນ ຈຶ່ງຊະນະກັບໄພທຳມະຊາດໄດ້, ຈຶ່ງດຳລົງຄົງຕົວຢູ່ໄດ້ ໃນການຕໍ່ສູ້ ຕ້ານກັບຄວາມທຸກຍາກອຶດຫິວ. ຍ້ອນແນວນັ້ນລະ ປະຊາຊົນທີ່ອາໄສຢູ່ນີ້ ຈາກຄົນຮຸ່ນນີ້ໄປສູ່ຮຸ່ນອື່ນຈຶ່ງມີນິໄສໃຈຄໍ ພິເສດຂອງໃຜຂອງລາວ ແລະ ໄດ້ໃຫ້ກຳເນີດແກ່ນັກຕໍ່ສູ້ທີ່ແທ້ຈິງທີ່ມີມານະຈິດອັນບໍ່ມີໃຜ ທັບນ້າງໄດ້. ຫລາຍຄົນໃນຈຳນວນນີ້ ມີຊື່ສຽງໂດ່ງດັງຢູ່ໃນປະຫວັດສາດ ດ້ວຍຜົນງານ ສູ້ຮົບອັນສະຫວ່າງສະໄຫວນັບໄດ້ສີ່ພັນປີຂອງຊົນຊາດຫວຽດນາມ.

ນັບຕັ້ງແຕ່ສະໄໝບູຮານມາ ເຂດນີ້ຖືກຂະໜານນາມນາມວ່າ ແມ່ນສະຖານ ທີ່ດຳລົງຊີວິດຂອງຊາວຫວຽດນາມຜູ້ຮັກຫອມອິດສະຫລະພາບ ແລະ ມີຄວາມພາກພູມໃຈ. ໃນສະໄໝກາງ ພວກເຂົາແມ່ນບຸກຄົນຜູ້ທຳອິດທີ່ໄດ້ຕອບສະໜອງຄຳຮຽກຮ້ອງຂອງບັນດາຂຸນພົນທີ່ມີຊື່ສຽງ ດ້ວຍການລຸກຂຶ້ນປົດປ່ອຍເອົາບ້ານເກີດເມືອງນອນໃຫ້ຫລຸດພົ້ນ ອອກຈາກແອກຄອບຄອງຂອງຕ່າງປະເທດ. ເຄີຍມີເຈົ້າຊີວິດ ແລະ ຜູ້ນຳຊາວນາຫລາຍຄົນໄດ້ກໍ່ສ້າງຖານທີ່ໝັ້ນຢູ່ແຫ່ງນີ້ ເພື່ອສະກັດກັ້ນການບຸກຕີບຽດຍຶດຫວຽດນາມ ໂດຍພວກຮຸກຮານຈີນ. ຢູ່ແຫ່ງນີ້ເອງ ພວກເຂົາໄດ້ເອົາຊາວບ້ານຜູ້ເຂັ້ມແຂງຂອງທ້ອງຖິ່ນ ເພີ່ມເຂົ້າໃນກອງທັບຂອງເຂົາ, ຈາກນັ້ນກໍ່ມຸ່ງໜ້າຂຶ້ນພາກເໜືອເພື່ອຕີຂັບໄລ່ພວກຮຸກຮານແລ້ວປົດປ່ອຍເອົາບ້ານເກີດເມືອງນອນອັນແສນຮັກຂອງຕົນ.

ໃນສະໄໝທີ່ພວກລ່າເມືອງຂຶ້ນຝະລັ່ງຄອບຄອງ ມີຫລາຍຂະບວນການປົດປ່ອຍແລະຮັກຊາດຂອງປະຊາຊົນຫວຽດນາມ ໄດ້ກຳເນີດຈາກແຫ່ງນີ້. ໃນປີ ໑໙໓໐ ສອງແຂວງເງ່ອານ ແລະ ຮ່າຕິງ ແມ່ນບ່ອນສ້າງຕັ້ງອຳນາດການປົກຄອງປະຊາຊົນເທື່ອທຳອິດ ຢູ່ຫວຽດນາມ ນັ້ນຄືບັນດາສະພາໂຊວຽດຜູ້ແທນ ກຳມະກອນ ແລະ ຊາວນາ. ການລຸກຮືຂຶ້ນທີ່ມີການຈັດຕັ້ງເທື່ອທຳອິດຂອງຊົນຊັ້ນກຳມາຊີບຫວຽດນາມ ພາຍໃຕ້ການນຳພາຂອງພັກກອມມູນິດ ໃນກະໂຕນັ້ນເອງແມ່ນການຊ້ອມຮົບຂັ້ນໃຫຍ່ຂອງການປະຕິວັດເດືອນ ສິງຫາ ປີ ໑໙໔໕ ຊຶ່ງແມ່ນການປະຕິວັດທີ່ໄດ້ປົດປ່ອຍປະຊາຊົນຫວຽດນາມອອກຈາກ ແອກຄອບຄອງລ່າເມືອງຂຶ້ນ. ຊື່ ນັກຮົບປະຕິວັດ ໔໑໗ ຄົນທີ່ຖືກພວກລ່າເມືອງຂຶ້ນຝະລັ່ງປະຫານຊີວິດ ໄດ້ຖືກສະຫລັກໄວ້ຢູ່ອະນຸສາວະລີ ຖາຍຫລາວ ເພື່ອເປັນອະນຸສອນໃຫ້ແກ່ບັນດາວິລະຊົນຂອງຂະບວນການເພື່ອສ້າງຕັ້ງສະພາໂຊວຽດຕາມແບບຫວຽດນາມ. ອະນຸ

ສາວະລີດັ່ງກ່າວຕັ້ງຢູ່ບໍ່ໄກຈາກນະຄອນວິນ.

ແຂວງເງ່ອານ ໄດ້ຝຶກຝົນກໍ່ສ້າງນັກເຄື່ອນໄຫວຜູ້ມີຊື່ສຽງຫລາຍຄົນ ໃຫ້ແກ່ປະເທດຊາດຫວຽດນາມ ໂດຍສະເພາະເມືອງ ນາມດ່ານ ຊຶ່ງເປັນເມືອງໜຶ່ງ ທີ່ຕັ້ງຢູ່ ກ້ຳເໜືອຂອງນະຄອນວິນ. ຢູ່ແຫ່ງນີ້ ບໍ່ວ່າບ້ານໃດກໍຕາມ ກໍ່ແມ່ນບ້ານເກີດ ຂອງວິລະຊົນແຫ່ງຊາດເຊັ່ນ ຈອມທັບສະໄໝ ບູຮານ ຫລືນັກກະວີຜູ້ຍິ່ງໃຫຍ່ ນັກຮົບປະຕິວັດດີເດັ່ນ. ບໍ່ໜ້າປະຫລາດໃຈເລີຍທີ່ຢູ່ບ່ອນນີ້ເອງ ໃນວັນທີ ໑໙ ເດືອນພຶດສະພາປີ ໑໘໙໐ ສະຫາຍໂຮ່ຈີມິນ ລູກຮັກຜູ້ປະເສີດຂອງປະຊາຊົນຫວຽດນາມ ໄດ້ຖືກກຳເນີດຂຶ້ນ ແລະ ໃຊ້ຊີວິດໃນໄວເດັກຂອງເພິ່ນ.

ຜູ້ນຳໃນອະນາຄົດຂອງປະຊາຊົນຫວຽດນາມ ໄດ້ຖືກກຳເນີດຂຶ້ນໃນສະໄໝຫຍຸ້ງຍາກສັບສົນທີ່ສຸດຂອງປະຫວັດສາດຂອງຊາດ.

ໃນລະຫວ່າງກາງສະຕະວັດທີ ໑໙ ນັ້ນ ຍ້ອນວ່າຢາກແກ້ແຄ້ນໃຫ້ບັນພະບຸລຸດ ຜູ້ຍິ່ງໃຫຍ່ຂອງເຂົາຄື ໂບນາປາກ ພະເຈົ້າຈັກກະພັດຝະລັ່ງ ນາໂປເລອົງ ທີ ໓ ຈຶ່ງໄດ້ ເລີ່ມການແຜ່ອານາເຂດຫົວເມືອງຂຶ້ນຢູ່ທີ່ທະວີບອາຊີ. ປະເທດ ດາຍນາມ (ປະເທດ ອັນຍິ່ງໃຫຍ່ຂອງພາກໃຕ້) ດັ່ງທີ່ຊາວຫວຽດນາມ ໄດ້ເອີ້ນຫວຽດນາມໃນເວລານັ້ນ ຢ່າງທະນົງໃຈ ໄດ້ເປັນໜຶ່ງໃນບັນດາເປົ້າໝາຍອັນທຳອິດຂອງນະໂຍບາຍຮຸກຮານຂອງພະອົງ.

ກ່ອນນັ້ນ ສັດຕູຕົ້ນຕໍຂອງປະຊາຊົນຫວຽດນາມ ຍາມໃດກໍ່ແມ່ນ ລາດຊະວົງສັກດີນາຈີນ ພວກເຂົາໄດ້ຜັດປ່ຽນກັນຄອບຄອງຫວຽດນາມນານເກືອບ ເຖິງສິບສະຕະວັດ (ແຕ່ປີ ໓໙ ກ່ອນຄິດຕະສັກກະລາດຮອດປີ ໙໓໙). ຫລາຍສະຕະວັດຕໍ່ມາສັດຕູພວກນີ້ກໍຍັງດຳເນີນການຮຸກຮານປະເທດນີ້ຫລາຍຄັ້ງ ແຕ່ວ່າການຮຸກຮານແຕ່ລະຄັ້ງ ລ້ວນແຕ່ພົບກັບຄວາມປະລາໄຊຢ່າງເຈັບແສບ. ຍົກຕົວຢ່າງ ໃນຕອນຕົ້ນສະຕະວັດທີ ໑໕ ພາຍຫລັງການຕໍ່ສູ້ຕ້ານຢັນອັນຍືດເຍື້ອຍາວນານ ລຳບາກຍາກເຂັນທີ່ນຳພາໂດຍບັນດາວິລະ-ຊົນແຫ່ງຊາດເຊັ່ນ ເລເລີຍ ລູກຂອງຄົນຫາປາ ແລະ ຫງວຽນຈາຍ ນັກປາດຜູ້ດີເດັ່ນ, ພວກກອງທະຫານຂອງ ລາດຊະວົງມິງ ໄດ້ຖືກຂັບໄລ່ໄຖຫົວອອກຈາກຫວຽດນາມ. ສາມສະຕະວັດແຫ່ງການຂະຫຍາຍຕົວຢ່າງມີເອກະລາດໄດ້ຜ່ານພົ້ນໄປ ແຕ່ສັດຕູຕົວໃໝ່ທີ່ອັນຕະລາຍບໍ່ໜ້ອຍຊ້ຳພັດປະກົດຕົວຂຶ້ນ.

ໃນເດືອນສິງຫາ ປີ ໑໘໕໘ ຂະບວນເຮືອຮົບຂອງຝະລັ່ງ ນັບທັງເຮືອຮົບ ແອັດສະ

ປາຍ ໄດ້ບຸກຕະລຸມບອນປ້ອມທີ່ໝັ້ນ ດານັງ ຢ່າງກະທັນຫັນ ຊຶ່ງເປັນທີ່ໝັ້ນ ຕັນທາງ ເຂົ້າ ເວ້ ເມືອງຂອງເຈົ້າຊີວິດ. ໜຶ່ງປີຕໍ່ມາ ຂະບວນເຮືອດັ່ງກ່າວ ລ່ອງລົງໄປຮອດ ໄຊງ່ອນ ແລະ ຫລັງຈາກບັ້ນຮົບສັ້ນໆບັ້ນໜຶ່ງກໍໄດ້ຍຶດເອົານະຄອນດັ່ງກ່າວ. ເຖິງແມ່ນ ວ່າພວກລ່າເມືອງຂຶ້ນມີທ່າແຂງຢ່າງຈະແຈ້ງດ້ານການທະຫານກໍຕາມ ແຕ່ພວກເຂົາ ກໍບໍ່ ສາມາດຈຳໃຫ້ ຫວຽດນາມ ຍອມຈຳນົນໃນທັນທີທັນໃດ. ຄືດັ່ງບັນດານັກປະຫວັດສາດ ຫວຽດນາມໄດ້ຂຽນໄວ້ວ່າ ພວກເຂົາຈຳເປັນຕ້ອງປະຕິບັດຕາມວິທີ "ມ້ອນກິນໃບມອນ" ຈົນວ່າຊາວຫ້າປີຕໍ່ມາ ຄືປີ ໑໘໘໓ ເຈົ້າຊີວິດຫວຽດນາມ ຈຶ່ງຍົກທຸງຂາວ ແລະ ເຊັນ ສັນຍາຍອມຈຳນົນ. ອີງຕາມສັນຍາສະບັບນີ້ ຫວຽດນາມຈຶ່ງຍອມຮັບຮູ້ການ "ອາລັກຂາ" ຂອງປະເທດຝະລັ່ງ.

ໂດຍປະຕິບັດຕາມຫລັກການຂອງພວກຮຸກຮານຄື "ແບ່ງແຍກເພື່ອປົກຄອງ" ພວກ ລ່າເມືອງຂຶ້ນໄດ້ແບ່ງປະເທດຫວຽດນາມ ອອກເປັນສາມພາກ. ແຕ່ລະພາກມີລະບົບປົກ ຄອງສະເພາະຂອງໃຜມັນ; ພາກໃຕ້ເປັນເມືອງຂຶ້ນຂອງ ຝະລັ່ງ ໂດຍເອີ້ນວ່າໂກແຊັງ ຊິນ (ພາສາຫວຽດນາມເອີ້ນວ່າ ນາມໂບ ຫລື ນາມກີ່), ພາກເໜືອ ແລະ ພາກ ກາງ ແມ່ນດິນແດນອາລັກຂາທີ່ເອີ້ນວ່າ ຕົງແກງ ແລະ ອານນາມ (ພາສາ ຫວຽດ ນາມເອີ້ນວ່າ ບັກໂບ ແລະ ຈູງໂບ ຫລື ບັກກີ່ ແລະ ຈູງກີ່). ທາງດ້ານຮູບການ ຢູ່ ບັກກີ່ ແລະ ຈູງກີ່ ມີກົງຈັກບໍລິຫານຫວຽດນາມ ແຕ່ອຳນາດຂອງເຈົ້າຊີວິດ ຖືກຮັກ ສາໄວ້ຢູ່. ສ່ວນໃນຕົວຈິງແລ້ວ ທຸກງວຽກງານຢູ່ດິນແດນເມືອງຂຶ້ນ ຫລື "ອາລັກຂາ " ລ້ວນແຕ່ແມ່ນຄົນຝະລັ່ງເປັນຜູ້ປົກຄອງ, ທີ່ນາມກີ່ ມີຂ້າຫລວງເປັນຜູ້ປົກຄອງ, ຢູ່ທີ່ ຈູງ ກີ່ ແລະ ບັກກີ່ ກໍມີຜູ້ສຳເລັດລາຊະການເປັນຜູ້ປົກຄອງເຊັ່ນກັນ.

ແຕ່ວ່າ ພວກທີ່ມາຈາກຕາເວັນຕົກ ຊຶ່ງຄົນຫວຽດນາມ ເອີ້ນວ່າ ເຕຍ ນັ້ນກໍບໍ່ສາ ມາດດຳເນີນການຍຶດຄອງທົ່ວປະເທດນີ້ໄດ້ຢ່າງວ່ອງໄວ. ຢູ່ຕາມດິນແດນທີ່ມີ ປ່າເລົ່າ ຂອງເຂດພາກໃຕ້ ຢູ່ໃນປ່າຕົບພາກເໜືອ ແລະ ຢູ່ເຂດພູຜາເກາະກ່າຍກັນພາກກາງກໍ ໄດ້ມີທະຫານກອງຫລອນເປັນຈຳນວນຫລາຍ ດຳເນີນການສູ້ຮົບຢູ່. ໃນປີ ໑໘໘໕ ເຈົ້າ ຊີວິດຮ່າມງີ ເປັນເຈົ້າຊີວິດທີ່ມີອາຍຸພຽງ ໑໔ ປີ ແຕ່ມີນ້ຳໃຈຮັກຊາດອັນດູດດື່ມ, ພາຍ ຫລັງຂຶ້ນສະເຫວີຍລາດໄດ້ໜຶ່ງປີ ໄດ້ໂຕນປະລາຊະບັນລັງ ພ້ອມກັນກັບຊຸປະລາດ ຂອງ ພະອົງແລ້ວໜີເຂົ້າປ່າ ເພື່ອກໍ່ສ້າງຖານທີ່ໝັ້ນອັນແໜ້ນແກ່ນ. ພະອົງ ໄດ້ຮຽກຮ້ອງ ໄປຍັງປະຊາຊົນໃຫ້ລຸກຂຶ້ນກຳອາວຸດຕ້ານພວກຮຸກຮານຕ່າງດ້າວ. ດັ່ງນັ້ນ ຂະບວນການ

ປົດປ່ອຍທີ່ດຳເນີນໄປຢູ່ພາຍໃຕ້ການນຳພາຂອງບັນດາສັກດີນາທີ່ເປັນປັນຍາຊົນ ຈຶ່ງກຳເນີດຂຶ້ນ. ຢູ່ໃນປະຫວັດສາດຫວຽດນາມ ຂະບວນການນີ້ເອີ້ນວ່າຂະບວນ "ເກິ່ນເວືອງ" (ແປວ່າຄວາມຈົງຮັກພັກດີຕໍ່ລາຊາທິປະໄຕ). ຈົນຮອດທ້າຍຊຸມປີ ໙໐ພວກລ່າເມືອງຂຶ້ນຝະລັ່ງ ສາມາດຈັບເຈົ້າຊີວິດຮ່າມງີ ຜູ້ກະບົດ ແລະ ຈາກນັ້ນຈຶ່ງດັບມອດແປວໄຟອັນສຳຄັນຂອງຂະບວນການ "ເກິ່ນເວືອງ" ໄດ້.

ເຖິງຢ່າງໃດກໍຕາມ ການຈັບເຈົ້າຊີວິດຮ່າມງີ ແລ້ວ ຍົກເອົາດົງແຂັງ ຜູ້ເປັນນ້ອງຊາຍ ຂຶ້ນສະເໜີຍລາດແທນ, ທັງໆທີ່ເຈົ້າຊີວິດອົງນີ້ໃຫ້ຄຳປະຕິຍານວ່າ ຈະຈົງຮັກພັກດີຕໍ່ພວກຮຸກຮານກໍຕາມ ແຕ່ພວກລ່າເມືອງຂຶ້ນຝະລັ່ງ ກໍບໍ່ມີວິທີໃດຈະສາມາດ ດັບມອດການຕໍ່ຕ້ານດ້ວຍອາວຸດຂອງປະຊາຊົນຫວຽດນາມ. ການລຸກຮືຂຶ້ນດັ່ງກ່າວສືບຕໍ່ ແກ່ຍາວເກືອບຊາວປີ. ຢູ່ພາກກາງ ພວກສັກດີນາທີ່ເປັນປັນຍາຊົນຮັກຊາດ ໄດ້ເຕົ້າໂຮມຢູ່ອ້ອມຂ້າງ ຟານດິງຟູງ ຊຶ່ງເປັນນັກປາດເອກຂອງແຂວງ ຮ່າຕິງ ແລະ ສືບຕໍ່ຕໍ່ຕ້ານຝະລັ່ງ. ຢູ່ພາກເໜືອ ບັນດາກອງຫລອນປະຊາຊົນພາຍໃຕ້ການນຳພາ ຂອງຮ່ວງຮວາຖາມ ຊຶ່ງເປັນຊາວນາຫຼຸກຄົນໜຶ່ງ ໄດ້ທຳການເຄື່ອນໄຫວຈົນເຮັດໃຫ້ພວກຝະລັ່ງ ຢູ່ບໍ່ເປັນສຸກໄດ້ເລີຍ. ໃນປີ ໑໙໑໓ ຮວາງຮວາຖາມ ຖືກຂ້າຕາຍດ້ວຍນ້ຳມືເປື້ອນເລືອດຂອງພວກທໍລະຍົດ, ສ່ວນບັນດາກຳລັງຕົ້ນຕໍຂອງຂະບວນການດັ່ງກ່າວ ໄດ້ຖືກທັບມ້າງໃນຕອນຕົ້ນຂອງຊຸມປີຊາວ. ເຖິງຢ່າງນັ້ນກໍຕາມ ສຽງເພງ ແລະ ບົດກະວີທີ່ຊົມເຊີຍວິລະກຳທີ່ລືຊາຜາກົດຂອງບັນດາຜູ້ນຳທະຫານກອງຫລອນ ແລະ ບັນດາເພື່ອນ ຮ່ວມລົບຂອງເຂົາ ກໍຍັງເປັນທີ່ນິຍົມຊົມຊອບສຳລັບປະຊາຊົນຢູ່ຕະຫລອດເວລາ.

ແຕ່ອັນນັ້ນມັນແມ່ນສຽງກອງກັງວານສຸດທ້າຍຂອງພາຍຸລົມແດງທີ່ກຳລັງ ອ່ອນແຮງລົງຢ່າງເຊື່ອຍຊ້າ. ໂດຍຊົມເຊີຍຄວາມເກັ່ງກ້າເດັດດ່ຽວຂອງຊາວຜູ້ຮັກຊາດກ້າຫານທີ່ສຸດ, ໃນເວລາດຽວກັນ ການເລົ່າເລື່ອງຕ່າງໆກໍເຈືອປົນໄປດ້ວຍຄວາມຂົມຂື່ນ ຍ້ອນອິດສະຫລະພາບຂອງປະເທດຊາດອັນແສນຮັກ ຊຶ່ງປະຈຸບັນນີ້ບໍ່ມີອີກແລ້ວ ແລະ ຄວາມອາໄລອາວອນເຖິງອະດີດຕະການອັນສະຫວ່າງສະໄຫວ ທີ່ໄດ້ລ່ວງລັບໄປແລ້ວ. ຍ່ວງເຂົ້າຕົ້ນສະຕະວັດທີ ໒໐ ປະເທດ ດາຍນາມ ຖືກສາຍໂສ້ ຂື່ຄາຂອງລະບອບລ່າເມືອງຂຶ້ນ ຮັດຮຶງ.

ແຕ່ປະເທດຊາດບໍ່ຍອມຈຳນົນ ມັນກຳລັງລໍຖ້າເວລານາທີຂອງມັນ ກຳລັງລໍຖ້າການປະກົດຕົວຂອງບັນດາວິລະຊົນໃໝ່ ຊຶ່ງເປັນບຸກຄົນທີ່ສາມາດຊັກຫຼູງປົດປ່ອຍຊາດ ຊຶ່ງໄດ້

ຫລຸດຫລຸ້ຍອອກຈາກກຳມືຂອງຊາວຜູ້ຮັກຊາດຂອງ ສະຕະວັດຜ່ານມານັ້ນໃຫ້ສູງຂຶ້ນ. ເຖິງຖ້າວ່ານາທີອັນສະຫວ່າງສະໄຫວຂອງໄຊຊະນະດັ່ງກ່າວ ຈະຍັງອີກດົນນານປານໃດ ກໍຕາມ ແຕ່ນັກຮົບໃໝ່ເພື່ອໄຊຊະນະດັ່ງກ່າວກໍ່ໄດ້ກຳເນີດຂຶ້ນແລ້ວ ຢູ່ຕາມບັນດາຫົວເມືອງ, ຕາມຊຸ້ມບ້ານຂອງຫວຽດນາມ. ຄົນພວກນີ້ໄດ້ຮັບຟັງຈາກການບອກເລົ່າ ຂອງບັນພະບຸລຸດຂອງພວກເຂົາເອງ ກ່ຽວກັບອະດີດອັນພິລະອາດຫານ ແລະ ປະຈຸບັນ ອັນແສນເຈັບແສບຂອງປະເທດຊາດ. ຫົວໃຈຂອງພວກເຂົາແໜ້ນອັ່ງໄປດ້ວຍ ຄວາມຄຽດແຄ້ນຕໍ່ພວກຕ່າງດ້າວຜູ້ກົດຂີ່ຂູດຮີດ.

ຄິດເຖິງອິດສະຫລະພາບ

໑

"ຂ້າພະບາດຂໍນ້ອມຄາລະວະຂໍອະໄພຍະໂທດແກ່ກອງທະຫານຮັກສາພະອົງທີ່ບໍ່ໄດ້ຢູ່ໃກ້ຊິດພະອົງ ເພື່ອປ້ອງກັນພະອົງໃຫ້ຫລຸດພົ້ນຈາກເງື້ອມມືຂອງພວກທໍລະຍົດ ແລະພວກຜີມານຝະລັ່ງ. ໃນເວລາເກີດສະພາວະຄັບຂັນປະເທດຊາດໄດ້ຮັບຄວາມສັ່ນສະເທືອນ, ອັນເຮັດໃຫ້ບ່າວໄພ່ລາຊະດອນໄດ້ຮັບຄວາມເຈັບຊ້ຳຫນຳໃຈ, ຟ້າໄດ້ບົ່ງການໃຫ້ຈັບລາດຊະດອນຜູ້ຈົງຮັກພັກດີຕໍ່ພະອົງໄປຢູ່ທີ່ຫ່າງໄກຈາກພະອົງ, ຍູ້ໃຫ້ຕົກຢູ່ໃນສະພາວະເດືອດຮ້ອນດັ່ງກ່າວ". ໂດຍສະທົກສະທ້ານທີ່ສຸດເມື່ອໄດ້ຍິນຂ່າວວ່າ ເຈົ້າຊີວິດ ຮ່າມງີ ຖືກພວກທໍລະຍົດຊີ້ທາງໃຫ້ພວກປ່າເຖື່ອນ ຝະລັ່ງ ຈັບໄປເຂົ້າຄຸກ, ໂຕນເທີດຄ້ານຊຶ່ງເປັນຊູປະລາດຂອງເຈົ້າຊີວິດຫນຸ່ມຈຶ່ງຂຽນໄວ້ດັ່ງກ່າວມາເທິງນີ້. ໂຕນເທີດຄ້ານ ບໍ່ສາມາດທົນຕໍ່ການຢຽບຢ່ຳທຳລາຍປະເທດຊາດ ແລະ ພະລາຊະບັນລັງຂອງເຈົ້າຊີວິດທີ່ຫລຸດໄປຢູ່ໃນກຳມືຂອງຄົນອື່ນໄດ້ ສະນັ້ນຈຶ່ງໄດ້ຂ້າຕົວຕາຍ. ກ່ອນສິ້ນໃຈ ເພິ່ນໄດ້ຮ້ອງຂໍໃຫ້ບັນດາເສນາອາມາດ ແລະ ບັນດານັກປາດທັງຫລາຍທີ່ຢູ່ນະທີ່ນັ້ນ ຈົ່ງປະຕິຍານ ຕໍ່ເພິ່ນວ່າຈະບໍ່ຮ່ວມມືກັບພວກຮຸກຮານຢ່າງເດັດຂາດ.

ເຈົ້າຊີວິດ ຮ່າມງີ ພ້ອມດ້ວຍຂ້າລາຊະບໍລິພານຖືກພວກ ຝະລັ່ງ ຄວບຄຸມ ໄປຮອດນະຄອນເວ້ ຈາກນັ້ນກໍຖືກໃສ່ຄາສົ່ງໄປປະເທດຕາເວັນຕົກໄກສຸດຂອບຟ້າ ຄືປະເທດຝະລັ່ງ ຊຶ່ງເປັນບ້ານເກີດເມືອງນອນຂອງພວກຣຸກຣານ. ເວລານັ້ນເຈົ້າຊີວິດ ຮ່າມງີ ຫາກໍມີອາຍຸໄດ້ສິບເຈັດປີ, ແຕ່ພະອົງກໍປະພຶດຕົວຢ່າງສົມກຽດ ແລະ ຄວບຄຸມສະຕິໄດ້ ຈົນເຮັດໃຫ້ທະຫານສັດຕູແປກໃຈເປັນອັນມາກໃນທັນໃດໂລດ. ເຈົ້າຊີວິດບໍ່ຍອມກົ້ມຫົວ ໃຫ້ສັດຕູ ແຕ່ຍັງກ້າຫານກົ້ງຕາເບິ່ງໜ້າພວກເຂົາອີກຊ້ຳ. ຈາກນັ້ນກໍເງີຍໜ້າສູງຂຶ້ນດ້ວຍຄວາມທະນົງໃຈ ແລະ ເຈືອປົນໄປດ້ວຍຄວາມທຸກໂສກທີ່ພັນລະນາບໍ່ໄດ້ ຊຶ່ງຝັງໄວ້ ໃນດວງຕາ ເຈົ້າຊີວິດອຳລາປະເທດຊາດອັນແສນຮັກໄປຢ່າງບໍ່ມີວັນກັບ.

ຜູ້ເລົ່າເລື່ອງແມ່ນຊາຍໜວດຍາວອາຍຸກາງຄົນຜູ້ໜຶ່ງ, ລາວໄດ້ແນມເບິ່ງລູກຊາຍອາຍຸສິບສອງຂວບທີ່ກຳລັງມີນຕາກວ້າງຟັງຢ່າງຈົດຈໍ່. ທ້າວນ້ອຍຜູ້ນີ້ຊື່ວ່າ ຫງວຽນເຕີດແທ່ງ. ຕາມປະເພນີຂອງທ້ອງຖິ່ນ ເດັກນ້ອຍແຖຜົມຈຸກ ຫົ່ມເສື້ອສີດຳ ໃສ່ກະດຸມ ທາງຂ້າງເບື້ອງດຽວ. ເວລາຟັງ ທ້າວນ້ອຍສະອື້ນຂື້ນ ແລະ ບໍ່ອາດຈະກັ້ນນ້ຳຕາບໍ່ໃຫ້ໄຫລຍ້ອຍລົງຕາມສອງພວງແກ້ມທີ່ຈ່ອຍຜອມ.

"ພໍ່ເອີຍ, ຄົນຊັ້ນບັນດາວິລະຊົນກູ້ຊາດຂອງປະຊາຊົນເຮົາໄປຢູ່ໃສກັນໝົດແລ້ວ? ເປັນຍ້ອນຫຍັງພວກຝະລັ່ງຈຶ່ງຊະນະປະເທດເຮົາຢ່າງງ່າຍດາຍແທ້ ?"

"ບໍ່ແມ່ນຄືຈັ່ງຊັ້ນດອກລູກເອີຍ ! ຍຶດຄອງເອົາປະເທດເຮົາໄດ້ ພວກຝະລັ່ງກໍຕ້ອງໃຊ້ເວລາຕັ້ງສາມສິບປີພຸ້ນໃດ໋. ແມ່ນແຕ່ໃນປະຈຸບັນ ແປວໄຟຕໍ່ຕ້ານກໍຍັງລຸກໄໝ້ຢູ່".

ຫງວຽນເຕີດແທ່ງ ພໍໃຈນຳການເລົ່າເລື່ອງທຸກໆຄັ້ງໃນຕອນຄ່ຳຢູ່ເຮືອນ ທີ່ແສນຮັກຂອງຕົນເອງ. ເມື່ອຕາເວັນຕົກດິນ ຕະກຽງນ້ຳມັນກາດກໍຖືກໄຕ້ຂຶ້ນຢູ່ໃນ ຫ້ອງເຮືອນນ້ອຍໆ, ທ້າວນ້ອຍກໍໄດ້ຟັງການເລົ່າເລື່ອງຄ້າຍຄືວ່າບໍ່ມີຍາມເຫືອດແຫ້ງຈາກພໍ່ ທີ່ເວົ້າກ່ຽວກັບສະໄໝກ່ອນນີ້ ແລະ ຊຸມປີມໍ່ໆມານີ້. ພໍ່ຂອງທ້າວນ້ອຍຊື່ວ່າ ຫງວຽນຊິງສັກ ແມ່ນນັກປາດຜູ້ໜຶ່ງທີ່ມີຊື່ສຽງຢູ່ໃນເຂດນີ້. ເພິ່ນໄດ້ຮັບການສຶກສາຕາມລັດທິຂົງຈື້ ດັ່ງເດີມ, ເພິ່ນຈົດຈຳໄດ້ກັບປາກ "ຄຳພີສີ່ເຫລັ້ມ" ແລະ "ຄຳພີຫ້າເຫລັ້ມ" ຊຶ່ງເປັນປຶ້ມ ຄຳພີຂອງລັດທິ ຂົງຈື້ ສະໄໝບູຮານ. ຫວ່າງບໍ່ດົນມານີ້ ເພິ່ນໄດ້ເຂົ້າໄປໃນນະຄອນ ເວ້ ເພື່ອເຂົ້າຮ່ວມບັ້ນສອບເສັງ ແລະ ກັບມາໂດຍມີ "ງ່າໄມ້ແຄຢູ່ໃນກຳມືຂອງຕົນ." ສະໄໝກ່ອນມີຄົນມັກເວົ້າຄືແນວນີ້ກ່ຽວກັບບຸກຄົນທີ່ເສັງເອົາຕຳແໜ່ງພະລາຊະທານໄດ້.ມີ

ພະລາຊະໂອງການມອບນາມມະຍົດ ໂຟບັງ (ທຽບໃສ່ອະນຸບັນດິດ) ໃຫ້ແກ່ຫວງວຽນ
ຊິງສັກ.

ເຫດການດັ່ງກ່າວນັ້ນໄດ້ເຮັດໃຫ້ຄອບຄົວ ຫວງວຽນເຕິດແທ່ງ ມີການປ່ຽນແປງ. ສະໄໝກ່ອນ ຢູ່ປະເທດຫວຽດນາມ ຕາມຮີດຄອງປະເພນີແລ້ວ ເພິ່ນມັກເອີ້ນຊື່ຄົນ ເປັນຫລາຍຊື່. ຊື່ທຳອິດຫລືເປັນຊື່ເອີ້ນເວລາຍັງນ້ອຍ, ເປັນຊື່ທີ່ຕັ້ງໃຫ້ເດັກນ້ອຍທີ່ຫາກໍເກີດໃໝ່ ແລະ ເອີ້ນຊື່ນີ້ຈົນຮອດມື້ເຂົ້າໂຮງຮຽນ, ເມື່ອຮອດເວລານັ້ນ ຫົວໜ້າຄອບຄົວຈຶ່ງຕັ້ງຊື່ຖາວອນໃຫ້ລູກ ແລະ ຍັງເອີ້ນຊື່ຕາມຕົວ "ອັກສອນ" ຄືເປັນຊື່ທີ່ຂຽນໄວ້ ເປັນລາຍລັກອັກສອນໃນປຶ້ມໃນສໍ. ເວລາເກີດໃໝ່ ຫວງວຽນເຕິດແທ່ງມີຊື່ວ່າ ຫວງວຽນຊິງກຸງ. ເມື່ອເສັງໄດ້ຂັ້ນບັນດິດ ແລະ ກັບມາເຮືອນ, ວຽກທຳອິດຂອງຫວງວຽນຊິງສັກ ທີ່ຈະຕ້ອງໄດ້ເຮັດຄືຕັ້ງຊື່ໃໝ່ໃຫ້ລູກຊາຍ ເພາະອາຍຸຄົບກະສຽນເຂົ້າໂຮງຮຽນແລ້ວຄື ຊື່ວ່າ: ຫວງວຽນເຕິດແທ່ງ. ຊື່ນີ້ມັນສະແດງເຖິງຄວາມຮູ້ສຶກປິຕິຊົມຊື່ນຂອງເພິ່ນໃນວິນາທີປະສົບຜົນສຳເລັດໃນຊີວິດຂອງຕົນ ທັງແປວ່າ ຫວງວຽນ ຜູ້ຊະນະເລີດ.

ຫວງວຽນຊິງສັກ ສັງກັດຊັ້ນຄົນສັງຄົມພິເສດຢູ່ໃນຊົນນະບົດຫວຽດນາມສະໄໝນັ້ນ ຄືເພິ່ນເປັນນັກປາດ ໃນຊົນຊັ້ນສັກດີນາ. ຕາມປະເພນີ ຄົນມັກເອີ້ນຕົວແທນຂອງ ຊົນຊັ້ນດັ່ງກ່າວວ່າ ນັກລັດທິຂົງຈື້ ເພາະວ່າ ພວກເຂົາແມ່ນຜູ້ສືບທອດລັດທິຂົງຈື້-ເມັງຈື້, ລັດທິອັນໜຶ່ງທີ່ແຜ່ພາຍມາແຕ່ຈີນ ເຂົ້າຫວຽດນາມ ແລະ ນັບແຕ່ສະຕະວັດທີ ໑໔ ໄດ້ກາຍເປັນສາດສະໜາ ແລະ ລະບົບແນວຄິດທາງການຂອງບັນດາລາດຊະວົງຂອງສັກດີນາ-ຫວຽດນາມ. ແຕ່ວ່າ ຊື່ເອີ້ນດັ່ງກ່າວນັ້ນກໍບໍ່ຖືກຄັກແທ້ປານໃດ ເພາະວ່າ ຕາມຄຳເຫັນຂອງບັນດານັກປະຫວັດສາດຫວຽດນາມ ຮຸ່ນປະຈຸບັນນີ້, ລັດທິຂົງຈື້ເວລາແຜ່ເຂົ້າຫວຽດນາມແລ້ວນັ້ນ ໄດ້ຮັບເອົາອິດທິພົນອັນແຂງແກ່ນຈາກມູນເຊື້ອແລະ ແນວຄິດຮັກຊາດຂອງຊົນຊາດຫວຽດນາມ ແລະ ໄດ້ຮັບເອົາຄຸນນະລັກສະນະອັນກ້າວໜ້າຢ່າງຫລວງຫລາຍ, ເຊິ່ງບໍ່ເປັນລັກສະນະສະເພາະຂອງລັດທິ ຂົງຈື້.

ຖ້າວ່າພວກຈີນຜູ້ຮຸກຮານ ແລະ ພວກຫວຽດນາມຜູ້ຮ່ວມມືກັນກັບຈີນ ຊອກຫາທຸກວິທີທາງເພື່ອແຜ່ຂະຫຍາຍລັກສະນະປະຕິການສຸດຂີດຂອງລັດທິຂົງຈື້ ນັ້ນຄືບູຊາອຳນາດຂອງເຈົ້າຊີວິດຢ່າງຫລັບຫູຫລັບຕາ ຈາຣີດນິຍົມ ຄຳພີນິຍົມ ບັນດາຮູບການສຶກສາ ຮ່ຳຮຽນແບບຄຳພີຊື່ສັງ, ສ່ວນບັນດາຕົວແທນທີ່ມີແນວຄິດຮັກຊາດ ແລະ ກ້າວໜ້າ ຂອງບັນດາປັນຍາຊົນສັກດີນາຫວຽດນາມ ພັດເນັ້ນໜັກສົ່ງເສີມລັກສະນະສ້າງສາ ແລະ ສິ່ງທີ່ເປັນ

ປະໂຫຍດທີ່ມີຢູ່ລັດທິຂົງຈື້. ຍິ່ງກວ່ານັ້ນ ພວກເຂົາຍັງເຮັດໃຫ້ລັດທິຂົງຈື້ ສອດຄ່ອງ ກັບຄວາມຮຽກຮ້ອງຕ້ອງການຂອງການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນຫວຽດນາມ ແລະດັດແກ້ມັນໃຫ້ກາຍເປັນລັດທິອັນໜຶ່ງທີ່ບົ່ມຈູງນ້ຳໃຈຮັກຊາດ, ໃນບາງຄັ້ງຄາວ ມັນບົ່ມຈູງ ນ້ຳໃຈຕ້ານລາຊາທິປະໄຕອີກດ້ວຍ. ສະນັ້ນຢູ່ຫວຽດນາມ ຈຶ່ງມີສະພາບທີ່ວ່າ ນັກປາດຜູ້ທີ່ນິຍົມລັດທິຂົງຈື້ ຕາມປົກກະຕິແລ້ວກໍ່ເປັນທັງວິລະຊົນແຫ່ງຊາດ ເປັນຜູ້ນຳຂອງການຕໍ່ສູ້ປົດປ່ອຍ ເປັນຜູ້ນຳພາ ຫລືເຂົ້າຮ່ວມຢູ່ໃນການລຸກຮື້ຂຶ້ນຂອງຊາວນາ ຈຶ່ງເກີດຂຶ້ນ ໃນປະຫວັດສາດຢູ່ເລື້ອຍໆ.

ໜຶ່ງໃນຈຳນວນສິ່ງທີ່ຄອບງຳຢູ່ທົ່ວໄປຂອງລັດທິຂົງຈື້ນັ້ນ ຄື "ຈູງ" (ຄວາມ ຈົງຮັກພັກດີ) ຕາມຄຳສອນຂອງຂົງຈື້ນັ້ນ ບ່າວໄພ່ລາຊະດອນຕ້ອງຈົງຮັກພັກດີຕໍ່ເຈົ້າຊີວິດຢ່າງບໍ່ມີເງື່ອນໄຂ, ສ່ວນ "ຈູງ" ຂອງຫວຽດນາມ (ແປວ່າ ຄວາມຈົງຮັກພັກດີ)ຍາມໃດກໍ່ມີເງື່ອນໄຂ. ເງື່ອນໄຂພື້ນຖານແມ່ນທ່າທີຂອງເຈົ້າຊີວິດຕໍ່ປະເທດຊາດ. ຖ້າວ່າເຈົ້າຊີວິດເປັນຄົນຮັກຊາດ ຕາມປະເພນີຂອງຫວຽດນາມແລ້ວ "ຈູງກວນ" (ຈົງຮັກພັກດີຕໍ່ເຈົ້າຊີວິດ) ໄປນຳກັນກັບ "ອາຍກວັກ" (ຮັກປະເທດຊາດ). ຖ້າເຈົ້າຊີວິດຍອມຈຳນົນຕໍ່ສັດຕູ, ເປັນຜູ້ທໍລະຍົດຕໍ່ປະເທດຊາດນັ້ນແລ້ວ ຄວາມສຳນຶກ "ຈູງກວນ" (ຈົງຮັກພັກດີຕໍ່ເຈົ້າຊີວິດ) ຂັດກັບຄວາມສຳນຶກ "ອາຍກວັກ" (ຮັກປະເທດຊາດ) ເວລານັ້ນ ຄວາມຈົງຮັກພັກດີຕໍ່ເຈົ້າຊີວິດ ບໍ່ແມ່ນວ່າສິ່ງບັງຄັບສຳລັບບ່າວໄພ່ລາຊະດອນເລີຍ.

ນັບແຕ່ພວກລ່າເມືອງຂຶ້ນຝະລັ່ງມາຮຸກຮານ ຫວຽດນາມເປັນຕົ້ນມາ ລັກສະນະພິເສດຂອງລັດທິຂົງຈື້ຢູ່ຫວຽດນາມ ໄດ້ປະກົດຕົວຂຶ້ນຢ່າງເດັ່ນຊັດເປັນພິເສດ. ຕາບໃດທີ່ລະບອບລາຊາທິປະໄຕຍັງນຳໜ້າຂະບວນການຕໍ່ຕ້ານ ຕາບນັ້ນ ພວກນິຍົມລັດທິຂົງຈື້ ກໍ່ເປັນບ່ອນອີງອັນພື້ນຖານໃຫ້ແກ່ລະບອບດັ່ງກ່າວ. ເມື່ອຂະບວນການ "ເກິນເວືອງ" ພົບກັບຄວາມປະລາໄຊ ແລະ ລາດຊະວົງ ຫງວຽນເລີຍ ກາຍມາເປັນໄມ້ມື ຮັບໃຊ້ ພວກຮຸກຮານນັ້ນ ພວກນັບຖືລັດທິຂົງຈື້ສ່ວນຫລວງຫລາຍ ກໍ່ໄດ້ຕໍ່ຕ້ານຢ່າງແຂງແຮງ ຕໍ່ເຈົ້າຊີວິດ.

ຫງວຽນຊິງສັກ ແມ່ນຄົນທີ່ສະໜັບສະໜູນຝ່າຍທີ່ນິຍົມລັດທິຂົງຈື້ຮັກຊາດຢ່າງສຸດກົກສຸດປາຍ. ເພິ່ນຊອກທຸກວິທີທາງເຮັດໃຫ້ລູກຊາຍຊຶມນ້ຳໃຈຮັກຊາດດັ່ງກ່າວ. ເຖິງແມ່ນວ່າ ຈະໄດ້ຮັບອິດທິພົນອັນລ້ຳຄ່າດັ່ງກ່າວ ເຖິງແມ່ນວ່າຈະໄດ້ຮຽນປຶ້ມຕຳລາລັດທິ ຂົງຈື້

ເໝືອນກັບບັນດາເຍົາວະຊົນອື່ນໆກໍ່ຕາມ ແຕ່ທ້າວວຽນຕິດແທ້ງ ກໍຮັບຮູ້ໄດ້ລະບົບທັດສະນະການເມືອງ ແລະ ແນວຄິດທີ່ຜິດແປກອອກໄປອີກແບບໜຶ່ງ.

ຊາວບ້ານຮັກແພງ ແລະ ເຄົາລົບນັບຖື ທ້າວວຽນຊົງສັກທີ່ສຸດ. ພວກເຂົາເຈົ້າບໍ່ມັກອອກຊື່ຈິງ ແຕ່ມັກເອີ້ນເພິ່ນດ້ວຍຄວາມເຄົາລົບວ່າ "ມະຫາບັນດິດ". ກ່ອນນັ້ນ ສອບເສັງບໍ່ດົນ ກ່ອນທີ່ເພິ່ນຈະຍາດເອົາກຽດຕິຍົດມາໄດ້, ປ້າຮວາງທິລວານ ເມຍຂອງເພິ່ນ ຊຶ່ງມີອາຍຸຫາກໍໄດ້ສາມສິບສອງປີ ໄດ້ອຳລາໂລກໄປເສຍແລ້ວໃນຂະນະທີ່ເກີດລູກຄົນທີສີ່. ເດັກຜູ້ເກີດໃໝ່ມີສຸຂະພາບອ່ອນເພຍຫລາຍຈຶ່ງມີຊີວິດຢູ່ໄດ້ບໍ່ດົນ. ດ້ວຍຄວາມເສຍໃຈເປັນອັນມາກຕໍ່ເຫດການທີ່ຄາດບໍ່ເຖິງດັ່ງກ່າວ, ທ້າວວຽນຊົງສັກ ຈຶ່ງຈຳເປັນສົ່ງພວກລູກໆກັບມາຢູ່ບ້ານເກີດ ເພື່ອໃຫ້ແມ່ເຖົ້າເປັນຜູ້ດູແລລ້ຽງດູ, ສ່ວນຕົນເອງຍັງຈະຢູ່ເວ້ຕໍ່ໄປ, ເມື່ອຮູ້ຂ່າວວ່າ ທ້າວວຽນຊົງສັກ ປະສົບຜົນສຳເລັດອັນຍິ່ງໃຫຍ່ ໃນຂັ້ນສອບເສັງ ຊາວບ້ານກິມລຽນ ຕົກລົງມອບດິນຕອນນ້ອຍໆໃຫ້ມະຫາບັນດິດຄົນທຳອິດ ໃນບ້ານພວກຕົນ, ແລະ ປຸກເຮືອນໜຶ່ງຫລັງມອບໃຫ້ເພິ່ນ. ບໍ່ທັນໄດ້ພໍເດືອນ ເຮືອນ ທີ່ເຮັດດ້ວຍໄມ້ໄຜ່ກໍຖືກປຸກຂຶ້ນ, ເຮືອນຕັ້ງຢູ່ລະຫວ່າງໂຮງຕີເຫລັກ ແລະ ສະລ້ຽງປາ ຂອງບ້ານ. ເຮືອນຫລັງນັ້ນບໍ່ມີຫຍັງພິເສດກວ່າເຮືອນຫລັງອື່ນຢູ່ໃນຄຸ້ມບ້ານ. ສະມາຊິກທຸກຄົນໃນຄອບຄົວຂອງບັນດິດ ກໍມາຢູ່ຮ່ວມກັນໃນເຮືອນຫລັງນີ້.

ເຄື່ອງໃຊ້ໄມ້ສອຍຂອງ ທ້າວວຽນຕິດແທ້ງ ຈະມີພຽງແຕ່ອູທີ່ມັດຕິດກັບຝາເຮືອນສຳລັບນອນ ໂຕະ ແລະ ແປ້ນມ້າເຮັດດ້ວຍໄມ້ ເບິ່ງລວດລາຍກໍເຫັນວ່າເຮັດພໍແລ້ວຮີດຊຸ້ນລະ. ຢູ່ອ້ອມເດີ່ນບ້ານນ້ອຍໆ ມີກໍໄຜ່ ແລະ ຕົ້ນກ້ວຍອັນຕຶບໜາ ມັນຮົ່ມເຢັນດີ ຍ້ອນທຸກຄົນໃນຄອບຄົວອຶດທົນບົວລະບັດຮັກສາ ເຮັດໃຫ້ກາຍເປັນສວນໝາກໄມ້ ອັນແທ້ຈິງເຊັ່ນ: ຕົ້ນໝາກ, ຕົ້ນໝາກນາວ, ຕົ້ນສົ້ມໂອ ແລະ ຕົ້ນໝາກມີ້.

ບ້ານກິມລຽນ ມີຊື່ສຽງກໍຍ້ອນວ່າມີສະລ້ຽງປາຫລາຍ, ສະໜ່ວຍໃດກໍມີແຕ່ ຜັກຕົບໝາຂຽວອຸ່ມທຸ່ມເຕັມສະ, ຢູ່ໃນສະ ດອກບົວສີຂາວ, ສີແດງ ເຊິ່ງຖືວ່າເປັນລາຊິນີແຫ່ງດອກບົວພວມແຂ່ງຂັນກັນພົ້ນຂຶ້ນຈາກໜ້ານ້ຳ. ສະນັ້ນ ບ້ານນີ້ຈຶ່ງມີຊື່ວ່າ ກິມລຽນໝາຍຄວາມວ່າ ດອກບົວ. ສະກໍມີປາຫລາຍ ຕອນເຊົ້າມື້ໃດ ທ້າວແທ້ງ ມັກໄປ ເບິ່ງຊາວບ້ານກວາດມອງເອົາປາ ແລະ ມີຫລາຍເທື່ອທ້າວນ້ອຍພ້ອມດ້ວຍໝູ່ເດັກນ້ອຍ ໃນບ້ານອວນກັນມານັ່ງແຄມສະຊິດປາດ້ວຍເບັດທີ່ເຮັດເອົາເອງ. ຢູ່ກາງສະຝູງຄວາຍແນບນ້ຳ ເພື່ອໃຫ້ຫາຍຄວາມຮ້ອນ ແລະ ໃຫ້ພົ້ນຈາກໂຕເຫລືອກອັນດຸຮ້າຍເປັນໝູ່ໆ, ຝູງ

ຄວາຍປ່ອນແຕ່ຫົວສີດຳໆ ທີ່ມີໜ່ວຍຕາອິດເມື່ອຍທັງຄູ້ພົ້ນຂຶ້ນຈາກໜ້ານ້ຳ. ພວກເດັກນ້ອຍ ຊຶ່ງກົ້ນຂຶ້ນຂີ່ຫລັງຄວາຍຢ່າງສະບາຍອາລົມ, ຫາງປາກກໍເປົ່າປີ່ໄປພ້ອມ.

ຊາວໜຸ່ມຍິງຊາຍບ້ານດອກບົວ ຮັກການຮ້ອງເພງຄືກັນກັບບ້ານອື່ນໆ ໃນເຂດນີ້. ຄວາມຮັກດັ່ງກ່າວເກີດຂຶ້ນພ້ອມກັບລົມຫາຍໃຈບາດທຳອິດ ເມື່ອລອດອອກຈາກ ທ້ອງແມ່ ມານັ້ນລະ. ຊາວບ້ານບົນດິນແດນເງອານ ເຊື່ອວ່າ ຄວາມລືຊາພາກົດຂອງ ຫງວຽນຢູ ນັກວັນນະຄະດີເກົ່າແກ່ຂອງຫວຽດນາມ ຊຶ່ງກາຍເປັນນັກກະວີຜູ້ຍິ່ງໃຫຍ່ຄົນໜຶ່ງນັ້ນແມ່ນ ຍ້ອນວ່າເພິ່ນໄດ້ກຳເນີດ ແລະ ເຕີບໃຫຍ່ຂຶ້ນທ່າມກາງບົດຮ້ອງ ແລະ ກອນລຳທ້ອງຖິ່ນ ເງອານ. ແຕ່ຄາວຍັງນ້ອຍ ເພິ່ນມີຄວາມເກັ່ງກ້າສາມາດລຳຕອບກັນເປັນຍອດ. ປະຊາຊົນໃນເຂດນີ້ຕິດອົກຕິດໃຈກອນລຳແຕ່ເກົ່າກ່ອນ, ພິເສດແມ່ນກອນລຳກ່ອມລູກ ຊົມທຳມະຊາດ ຊົມຄວາມຮັກບ້ານເກີດເມືອງນອນ, ປະເທດຊາດ. ໃນໄວເດັກ ຫງວຽນ ເຕີດແທ່ງ ເຄີຍໄດ້ຟັງກອນລຳເຫລົ່ານັ້ນຫລາຍຄັ້ງຫລາຍຄາວ, ນ້າສາວຂອງແທ່ງແມ່ນ ໝໍລຳສຽງມ່ວນ ແລະ ມີຊື່ສຽງໃນເມືອງ, ນາງມັກຖືກເຊີນໄປລຳຢູ່ ຕາມຫົວເມືອງ ຕ່າງ ໆ.

໒

ຊາວບ້ານກົມລຽນ ດຳລົງຊີວິດຢູ່ຢ່າງລຳບາກຍາກແຄ້ນທີ່ສຸດ. ດິນນາສຳລັບປູກດຳ ມີບໍ່ພຽງພໍ ສະເລ່ຍມີສາມຈາວ * ຕໍ່ຄົນ ແລະ ທີ່ດິນປູກຝັງເກືອບທັງໝົດແມ່ນຕົກໄປຢູ່ ກຳມືຂອງຄອບຄົວຮັ່ງຈຳນວນໜຶ່ງ. ສ່ວນໃຫຍ່ຂອງປະຊາຊົນທີ່ອາໄສຢູ່ໃນໝູ່ບ້ານ ປະກອບດ້ວຍຄົນທຸກຍາກທີ່ດຳລົງຊີວິດຢູ່ດ້ວຍການເຊົ່າທີ່ດິນ. ຕະຫລອດຊີວິດ ເຂົາເຈົ້າພົບແຕ່ຄວາມອຶດຢາກຂາດເຂີນ. ຍ້ອນວ່າບໍ່ມີໂສ້ງເສື້ອ, ດັ່ງນັ້ນ ໃນຕະຫລອດປີພວກເຂົາຈຶ່ງນຸ່ງແຕ່ໂສ້ງຂາສັ້ນເທົ່ານັ້ນ ສະນັ້ນ ປະຊາຊົນຢູ່ເຂດໃກ້ຄຽງຈຶ່ງເອີ້ນບ້ານ ດອກບົວ ແບບບໍ່ມ່ວນຫູວ່າ ເປັນບ້ານຂອງພວກຂີ້ທຸກ ໂສ້ງຂາສັ້ນ.

ແຕ່ລະວັນ ທ້າວແທ່ງ ແນມເຫັນແຕ່ສະພາບອຶດຫິວ ທຸກຍາກ ລຳບາກຍາກແຄ້ນ ຢູ່ອ້ອມຕົວ. ຂ້າລາຊະການໄດ້ເກັບພາສີໝົດທຸກອັນ ແລະ ຍິ່ງເກັບພາສີໜັກຂຶ້ນທຸກວັນ. ພໍ່ບ້ານກໍໂລບມາກໂລພາແບບບໍ່ອີ່ມບໍ່ເຕັມ, ແລະ ພວກເສດຖີມັ່ງມີຢູ່ໃນຊົນນະບົດ ກໍຂູດ

* ໜຶ່ງຈາວ ເທົ່າກັບ ໓໖໐ ແມັດມົນທົນ

ຮີດຊາວນາແບບບໍ່ອິດູູມາ.

ຂໍຍົກເອົາ ຄອບຄົວລຸງດຽນ ໄທບ້ານຂອງແທ່ງ ມາເປັນຕົວຢ່າງ. ຕະຫລອດທັງປີ ໃນຄອບຄົວໄດ້ກິນອີ່ມຈັກຄາບ ? ຄືຈະໄດ້ກິນອີ່ມກໍ່ແຕ່ໃນມື້ບຸນປີໃຫມ່ເທົ່ານັ້ນລະ. ເມື່ອປີໃຫມ່ມາຮອດ ພວກຊາວນາຈຶ່ງຫານຂ້າຫມູ ຂ້າໄກ່ ຊື້ເຫລົ້າຂາວ ເຮຮາມ່ວນຊື່ນ ຈັກສອງສາມມື້ ເພື່ອໃຫ້ລືມສະພາບທຸກຍາກຕະຫລອດປີຂອງຕົນໃນຊົ່ວຄັ້ງຊົ່ວຄາວ. ເມື່ອເຫັນສະພາບບ້ານເກີດເມືອງນອນຍາມໃດກໍທຸກຍາກປາກຫມອງ, ປະຊາຊົນຫນີປະບ້ານໄປຢູ່ຕ່າງແດນ ເພື່ອຫາລ້ຽງຊີບໃນໄລຍະຍາວ ແລະ ມີຫລາຍຄັ້ງກໍບໍ່ກັບມາອີກ ທ້າວນ້ອຍແທ່ງ ກໍຫວນຄິດເຫັນສະພາບຂອງລົດມ້າເຫລື້ອມເປັນເງົາງາມ ຂອງພວກຂຸນນາງຟະລັ່ງຢູ່ ເວ້, ຫວນຄິດເຫັນເຄື່ອງນຸ່ງທີ່ປະດັບປະດາດ້ວຍຄຳ ແລະ ແກ້ວປະເສີດຂອງເຈົ້າຊີວິດ ແລະ ລາຊະບໍລິພານຂອງພະອົງ ໃນມື້ບຸນປີໃຫມ່ ແລະ ໃນມື້ບວງສວງ ຟ້າແຖນທີ່ຈັດຂຶ້ນຢູ່ເນີນພູອັນຈົບງາມເບື້ອງໃຕ້ຂອງນະຄອນ ເວ້. ຫລານນ້ອຍແທ່ງຈຶ່ງຖາມຕົນເອງວ່າ: ເປັນຫຍັງຊີວິດຈຶ່ງຂາດຄວາມຍຸຕິທຳຄືຈັ່ງຊີ້ ?

ແທ່ງເປັນເດັກນ້ອຍຄົນຫນຶ່ງ ທີ່ມີຄວາມສະເທືອນໃຈໄວ, ຄວາມທຸກຍາກລຳບາກ, ຄວາມເສົ້າຫມອງຂອງຄົນອື່ນ ເຮັດໃຫ້ທ້າວນ້ອຍເຈັບປວດ ຊ້ຳໃຈຫລາຍກວ່າ ຄວາມລຳບາກຍາກຂັ້ນ, ຫມົ່ນຫມອງຂອງຕົນເອງ. ບາງທີເຫດການອັນຫນ້າສະຫລົດໃຈຊຶ່ງເກີດຂຶ້ນຢູ່ໃນການກໍ່ສ້າງ "ທາງສາຍເກືອຣາວ" (ໄປເຈີນນິງ) ອາດສ້າງ ຄວາມສະເທືອນໃຈອັນຮຸນແຮງ, ເລິກເຊິ່ງທີ່ສຸດຈົນວ່າບໍ່ສາມາດຈະລົບລ້າງອອກຈາກວິນຍານຂອງທ້າວນ້ອຍໄດ້.

ເກືອຣາວ ແມ່ນຮ່ອມພູຊຶ່ງເປັນບໍ່ກຳເນີດຂອງແມ່ນ້ຳລານ ຕິດກັບຊາຍແດນ ລາວ-ຫວຽດນາມ. ບ່ອນນີ້ເປັນເຂດປ່າຕຶບ ດົງຫນາ ຍາກທີ່ຈະມີຄົນເຂົ້າໄປເຖິງ. ເສັ້ນທາງທີ່ຕິດກັບປະເທດລາວ ແລະ ບັນດາເຂດພາກຕາເວັນຕົກຂອງແຂວງ ເງ່ອານຕໍ່ໃສ່ອ່າວຕົງແກງ ກໍເນັ່ງຜ່ານເຂດພູແຫ່ງນີ້ລະ. ພວກລ່າເມືອງຂຶ້ນບັງຄັບໃຫ້ຫມົດທຸກຄົນ ອອກແຮງງານຫນັກຫນ່ວງໃນການສ້າງທາງ. ພວກຜູ້ຊາຍອາຍຸແຕ່ ໑໘ ປີຫາ ໕໐ ປີ ລ້ວນແຕ່ຖືກກວາດຕ້ອນໄປຍັງສະຖານທີ່ກໍ່ສ້າງ. ເງື່ອນໄຂດຳລົງຊີວິດ ແລະ ເຮັດວຽກ ຢູ່ແຫ່ງນີ້ເຫລືອທົນທີ່ສຸດ: ປ່າຕຶບທີ່ດິນປຽກຊຸ່ມ, ເປັນບວກເປັນຕົມ ມີສັດຮ້າຍ ທັງງູ ຂີ້ເຂັບ ແມງວັນ ຍຸງ ແລະ ອາກາດອົບເອົ້າ ເຮັດໃຫ້ຫາຍໃຈຝືດ. ຄົນງານ ກິນບໍ່ອີ່ມທ້ອງ ໂສ້ງເສື້ອຂາດສ້ອຍ ເຮັດວຽກດ້ວຍຄວາມອິດເມື່ອຍໂຮຍແຮງໃຕ້ໄມ້ແສ້ ໄມ້ຄ້ອນ

ກາງຄືນກໍນອນຕາມຫນ້າດິນແຄມປ່າ. ປະຊາຊົນບ້ານດອກບົວ ແລະ ບັນດາບ້ານ ຢູ່ໃກ້ຄຽງຈຳນວນຫລາຍທີ່ຖືກຈັບໄປເຮັດທາງໄດ້ລົ້ມຕາຍຢູ່ປ່າດົງດິບເຂດທາງໄກທີ່ຫນ້າຢ້ານດັ່ງກ່າວ. ຈຳນວນຫນຶ່ງທີ່ລອດຊີວິດມາຮອດບ້ານກໍເປັນໄຂ້ປ່າ ແລະ ເປັນປະດົງ. ພວກເຂົາໄດ້ເລົ່າໃຫ້ຊາວບ້ານຟັງວ່າ ມີຄົນຕາຍຢູ່ ເກືອຮາວ ຍ້ອນເປັນໄຂ້ປ່າ ແລະ ເຮັດວຽກຫນັກເກີນກຳລັງຄືແນວໃດ, ສ່ວນສົບຂອງຜູ້ຕາຍຕ້ອງໄດ້ເອົາສາດຫໍ່ຝັງດິນ ຍ້ອນວ່າບໍ່ມີໂລງໃສ່ສົບ.

ຢູ່ໃນຈິດສຳນຶກຂອງທ້າວນ້ອຍແຫ່ງ ຜູ້ມີຄວາມຮູ້ສຶກສະເທືອນໃຈໄວນັ້ນ ໃນມື້ທີ່ປະຊາຊົນບ້ານດອກບົວ ໄດ້ໄປເຮັດວຽກກໍ່ສ້າງ ເກືອຮາວ ບໍ່ຕ່າງຫຍັງກັບມື້ທີ່ຊາວບ້ານດອກບົວ ທຳພິທີປັງສົບ. ພວກແມ່ຍິງຫຸກໂສກຮ້ອງໄຫ້ຄວນຄາງເປັນຫນ້າສົມເພດ ເວດທະນາຄືວ່າ ກ້ອນຊີ້ນຂາດເປັນຕ່ອນໆພຸ້ນລະ. ແຕ່ລະຄືນໄປສິ່ງບັນດາກູລີ ຜູ້ຖືກເຄາະຮ້າຍຈົນຮອດນອກບ້ານ. ທ່າມກາງຫມູ່ຮຸ້ນລາວຄາວດຽວກັນ ທ້າວນ້ອຍແຫ່ງ ຢືນຢູ່ແຄມທາງແນມເບິ່ງຝູງຄົນນຸ່ງໂສ້ງເສື້ອຂາດກິດຂາດຕ່ອນ ຈ່ອຍຜອມຍ່າງລາກຂາແຕ່ລະບາດກ້າວ ທ່າມກາງສຽງຮ້ອງອຳລາອັນເສົ້າສະຫລົດ.

ບາງຄັ້ງໃນຕອນກາງຄືນ, ທ້າວນ້ອຍ ແຫ່ງ ຕົກໃຈຕື່ນນອນຍ້ອນສຽງອຶກກະທຶກເມືອງມັນ. ສຽງຄ້ອງສຽງກອງດັງລຽນຕິດ ເຮັດໃຫ້ເກີດຄວາມກັງວົນຢ່າງຫນັກຫນ່ວງ ສຽງຫມາເຫົ່າ ດັງຄັບທິບປະປົນກັບສຽງຮ້ອງໄຫ້ຂອງແມ່ຍິງ. ຈາກປ່ອງຢ້ຽມທ້າວແຫ່ງແນມເຫັນ ທອນໄຟພິຣບຣີ ຄວັນມັນປິວໄປປິວມາ ບຸດຫນຶ່ງຢູ່ທີ່ຫົວບ້ານ ບຸດຫນຶ່ງຢູ່ທີ່ຫາງບ້ານ ປະກົດຄືກັນກັບວ່າຢູ່ໃນຄວາມຝັນຊັ້ນລະ.

"ພໍ່ເອີຍ, ເກີດເລື່ອງຫຍັງຂັ້ນບໍ ?" ທ້າວນ້ອຍແຫ່ງເຄິ່ງຕື່ນເຄິ່ງຝັນ ຕົກໃຈຮ້ອງຂຶ້ນ.

"ນອນຫລັບສາລູກ ! ບາງເທື່ອອາດແມ່ນຜູ້ເຄາະຮ້າຍຄົນໃດຄົນຫນຶ່ງຖືກຈັບໄປກໍເປັນໄດ້",ພໍ່ຂອງ ແຫ່ງ ຕອບຄ່ອຍໆ. ເພິ່ນລູບໆຄຳໆຫົວລູກຊາຍ ເຮັດຕີພໍໃຫ້ ທ້າວນ້ອຍເຊົາຢ້ານ ແຕ່ມືຂອງເພິ່ນກໍຍັງສັ່ນຢູ່ນັ້ນເອງ.

ຢູ່ທ່າມກາງແສງໄຟສະຫລົວນັ້ນ ແຫ່ງ ແລະ ພວກອ້າຍເອື້ອຍແນມເຫັນຄົນຫນຶ່ງກຸ່ມ. ເບື້ອງຫນ້າມີສາມຄົນຖືກມັດສອກແປ້ນມາທາງຫລັງ ດ້ອມຫົວຕ່ຳລົງ ສ່ວນເບື້ອງຫລັງແມ່ນທະຫານຫນຶ່ງຈຸ. ໃນຈຳນວນສາມຄົນນັ້ນ ແຫ່ງ ຈື່ໄດ້ວ່າມີພໍ່ຂອງຫມູ່ຂອງແຫ່ງເອງ ຊຶ່ງເຄີຍພາກັນແລ່ນປ່ອຍວ່າວຢູ່ເທິງຈອມພູ ຈູງ ຫລາຍຄັ້ງ ຢູ່ນອກບ້ານ. ຄືນນັ້ນ

ທ້າວນ້ອຍນອນຫລັບຕາບໍ່ໄດ້ຈັກດຶ. ບຸດໜຶ່ງ ທ້າວນ້ອຍກິນນ້ຳຕາແທງຄວາມສິງສານ , ບຸດໜຶ່ງອາດພາບວິທີແກ້ແຄ້ນ ພວກກໍ່ໂຫດກຳ ເຖິງແມ່ນວ່າ ທ້າວນ້ອຍເອງ ຍັງອາດພາບໜ້າຕາຂອງພວກເຂົາບໍ່ແຈ້ງຄັກປານໃດກໍຕາມ.

ຈາກນັ້ນມາ ກໍຍັງມີຫລາຍຄືນທີ່ເກີດສະພາບເດືອດຮ້ອນຕິດໆຕໍ່ໆຄືດັ່ງຄືນ ທີ່ຜ່ານມານັ້ນອີກ. ເພື່ອຫລົບຫລີກຈາກການອອກແຮງງານຢ່າງທໍລະມານໂດຍບັງຄັບ ນັບມື້ນັບມີຊາວນາຈຳນວນຫລາຍໂຕນໜີເຂົ້າປ່າແຖວບໍລິເວນໃກ້ໆ. ຫລາຍໆຄືນ ພວກເຂົາ ກໍຖືກພວກທະຫານຢູ່ຄ້າຍຕ່າງໆຊອກຈັບຢ່າງໂຫດຮ້າຍ.

ຄອບຄົວຂອງພໍ່ເຖົ້າຫວງວຽນຊິງສັກ ບໍ່ໄດ້ຖືກຈັບໄປເຮັດວຽກສັບພະທຸກ ເພາະວ່າເປັນຄອບຄົວຂອງພໍ່ເຖົ້າໝີ່ ກີເນາມ ໂຟບັງ. ແຕ່ບັ້ນດິດກໍບໍ່ອາດເມີນເສີຍຕໍ່ຄວາມທຸກໂສກທີ່ນັບວັນທະວີຄູນຂຶ້ນເຕັງທົ່ວຊາວບ້ານ ຊຶ່ງພວກລູກໆຂອງເຂົາແມ່ນລູກສິດຂອງພໍ່ເຖົ້າເອງ. ຈະເຮັດແນວໃດ ເພື່ອຊ່ວຍພວກທີ່ໄດ້ຮັບເຄາະຮ້າຍ ? ຫລັງຈາກໄດ້ ຄຶ້ນຄິດມາໄດ້ຫລາຍຄືນແລ້ວ ພໍ່ເຖົ້າບັ້ນດິດກໍຕັດສິນໃຈຂາຍດິນສ່ວນໜຶ່ງທີ່ຊາວບ້ານໄດ້ມອບໃຫ້ພໍ່ເຖົ້າເພື່ອໃຫ້ໄດ້ເງິນມາຊ່ວຍຄອບຄົວເຫລົ່ານັ້ນ.

ໂສກນາດຕະກຳ "ເສັ້ນທາງເກືອຮາວ" ໄດ້ສ້າງຮອຍລະລຶກ ອັນເລິກເຊິ່ງລົງໃນດວງວິນຍານທີ່ສະເທືອນໃຈໄວຂອງແທັ່ງ ໂດຍໄດ້ເຮັດໃຫ້ແທັ່ງ ຄິດຢູ່ຕະຫລອດ ເວລາ ກ່ຽວກັບການດຳລົງຊີວິດ ສະພາບອັນແສນລຳບາກຢູ່ອ້ອມຕົວ. ຄວາມທຸກທໍລະມານຂອງຊາວບ້ານ ໄດ້ຊ່ວຍແທັ່ງ ໃຫ້ແນມເຫັນຢ່າງຈະແຈ້ງຕໍ່ສິ່ງທີ່ເຮັດໃຫ້ເກີດມີເຄາະກຳ ແລະ ບັນດາສິ່ງຜິດລະບຽບ ຄວາມບໍ່ຍຸດຕິທຳອື່ນໆທີ່ກຳລັງຄອບງຳຢູ່ເທິງແຜ່ນດິນຫວຽດນາມ ທີ່ເປັນເມືອງຂຶ້ນ ຊຶ່ງເມື່ອກ່ອນນີ້ ແທັ່ງ ຍັງມອງບໍ່ທັນເຫັນ ຍ້ອນວ່າຖືສິ່ງ ເຫລົ່ານັ້ນ ເປັນເລື່ອງທຳມະຊາດ. ແທັ່ງ ເປັນຜູ້ທີ່ຢາກຮູ້ຢາກເຫັນ ມັກຄິດ ແລະ ຂະຫຍາຍຕົວໄວກວ່າອາຍຸ ຖ້າສົມທຽບໃສ່ຄົນອາຍຸຮຸ່ນດຽວກັນ, ແທັ່ງໄດ້ຊອກຫາຄຳຕອບໃຫ້ແກ່ຄຳຖາມຂອງຕົນເອງຕາມປຶ້ມຕ່າງໆ.

ພໍ່ຂອງແທັ່ງ ໄດ້ຕຳນິລະບົບການສຶກສາດັ້ງເດີມທີ່ພົ້ນສະໄໝໄປແລ້ວ. ລະບົບການສຶກສາດັ່ງກ່າວ ອີງໃສ່ຄຳພີຊຸສີງຂອງລັດທິຂົງຈື້ ສະນັ້ນມັນຈຶ່ງບໍ່ສອນໃຫ້ມີ ຄວາມຮູ້ທາງພາກປະຕິບັດອັນຈຳເປັນໄດ້, ແຕ່ຊ້ຳພັດເປີດໂອກາດກ້າວໄປສູ່ຕຳແໜ່ງຂ້າລາຊະການ. ແຕ່ວ່າສິ່ງດັ່ງກ່າວ ເປັນສິ່ງທີ່ໜ້າເບື່ອໜ່າຍສຳລັບທາດແທ້ຂອງບັ້ນດິດ. ພໍ່ເຖົ້າ

ມັກເວົ້າສູ່ລູກເຕົ້າຟັງເລື່ອງທີ່ມີລັກສະນະສຶກສາອົບຮົມ ທີ່ອົບໂຮມໄດ້ແຕ່ອະດີດຕະການຂອງປະເທດຊາດ ສັ່ງສອນໃຫ້ລູກເຕົ້າເຂົ້າໃຈສູ່ພາສິດ ແລະ ຄຳສັ່ງສອນຂອງ ບັນດາບັນພະບຸລຸດຜູ້ມີປັນຍາເລີດແຕ່ເກົ່າກ່ອນທີ່ມີຄວາມນຶກຄິດໃກ້ຄຽງກັບຄວາມນຶກຄິດ ຂອງພໍ່ເຖົ້າ.

ພາຍຫລັງທີ່ໄດ້ຍ້າຍມາຢູ່ບ້ານກິມລຽນແລ້ວ ພໍ່ເຖົ້າສັກ ໄດ້ສົ່ງແຫ້ວໄປຮຽນຫນັງສືນຳ ເວືອງຖຸກກຸຍ ຊຶ່ງເປັນເພື່ອນຂອງເພິ່ນ ທັງເປັນຫນຶ່ງໃນສີ່ຄົນທີ່ເປັນຄູສອນຜູ້ມີຊື່ສຽງທີ່ສຸດຂອງເມືອງ ນາມດ່ານ ແລະ ທັງເປັນຜູ້ມີຈິດໃຈຮັກຊາດ. ເພິ່ນໄດ້ປູກຝັງໃຫ້ແຫ້ວມີນ້ຳໃຈຮັກປະເທດຊາດ, ສິດສອນປະຫວັດສາດອັນພິລະອາດຫານ ຂອງປະເທດຊາດ. ໂດຍຜ່ານແບບຢ່າງຈາກຊີວິດຂອງບັນດາວິລະຊົນແຫ່ງຊາດ ເພິ່ນສິດສອນ ກ່ຽວກັບຄຸນສົມບັດອັນສູງສົ່ງ ແລະ ນ້ຳໃຈກ້າແກ່ນເສຍສະຫລະ ເພື່ອປະເທດຊາດ.

ຄູສອນ ເວືອງຖຸກກຸຍ ແຕກຕ່າງກັນຢ່າງຂາດຂັ້ນກັບຄູສອນທີ່ ແຫ້ວ ໄດ້ຮຽນນຳແຕ່ອາຍຸ ໑໓ ປີ. ເພິ່ນເປັນຄົນຫນຶ່ງທີ່ມີແນວຄິດຮັກສາເດີມ, ທັງເປັນຄົນນັບຖືຄຳພີ ຊີສົງ ຂອງລັດທິ ຂົງຈື້ ຢ່າງຫລັບຫູຫລັບຕາ. ຕອນເລີ່ມຕົ້ນ ແຫ້ວ ເອົາໃຈໃສ່ໄປຮຽນ. ຈາກນັ້ນບໍ່ໃສ່ມື້ ຄູອ່ານໃຫ້ແຫ້ວ ເປັນຜູ້ຈົດບົດໃນຊຸດ "ຄຳພີສີ່ເຫລັ້ມ", "ຄຳພີ ຫ້າເຫລັ້ມ". ເມື່ອຈົດສຳເລັດກໍເປັນອັນວ່າ ແຫ້ວ ຈື່ບັນດາບົດເຫລົ່ານັ້ນໄດ້ກັບປາກ. ໂດຍແຕກຕ່າງກັບພວກນັກຮຽນຄົນອື່ນ ຍາມໃດ ແຫ້ວ ກໍພະຍາຍາມຊອກຫາ ຄວາມຫມາຍຂອງບົດກະວີ ຢ່າງເລັ່ງລັດ ສະນັ້ນ ຫລາຍຄັ້ງຈຶ່ງເຮັດໃຫ້ຄູຜູ້ມີຊື່ສຽງຕ້ອງແປກໃຈ ແລະ ບໍ່ອາດຕອບຄຳຖາມ ໂດຍບັງເອີນຂອງແຫ້ວໄດ້ກັບທີ່.ຮຽນໄດ້ບໍ່ດົນ, ຫລານແຫ້ວກໍເບື່ອຮຽນ "ຄຳພີສີ່ເຫລັ້ມ" "ຄຳພີຫ້າເຫລັ້ມ", ສະນັ້ນ ໃນເວລານອກໂມງຮຽນ, ແຫ້ວຈຶ່ງມັກອ່ານບັນດາປຶ້ມນະວະນິຍາຍປະຫວັດສາດເກົ່າແກ່ຂອງ ຈີນຢ່າງຫລົງໄຫລເຊັ່ນ : "ສາມກົກ", "ການທ່ອງທ່ຽວໄປໃນຕາເວັນຕົກ". ຜົນສຸດທ້າຍ ຄູສອນກໍເກີດ ຄວາມໂມໂຫ ບໍ່ຍອມສອນ ແຫ້ວ ຜູ້ມັກສໍ້ສົນ.

ນ້ຳໃຈຮັກຊາດ ຮັກຫອມອິດສະຫລະພາບທີ່ເປັນເນື້ອໃນບົດປະພັນອັນມະຄະດີ ບູຮານຫວຽດນາມ ໄດ້ປະສຽງກ້ອງກັງວານໄວ້ ໃນດວງວິນຍານຂອງແຫ້ວ. ທ້າວນ້ອຍແຫ້ວນິຍົມຊົມຊອບແລະ ອ່ານຢ່າງເພີດເພີນ ບົດປະພັນຮ້ອຍແກ້ວຂອງ ຫງວຽນຈາຍ ນັກກະວີ ນັກແນວຄິດ ຜູ້ບັນຊາການທະຫານ ນັກໄຝ່ຝັນລອຍເມກຜູ້ທຳອິດຂອງຫວຽດນາມຜູ້ທີ່ປາຖະຫນາຢາກນຳເອົາຊີວິດອິດສະຫລະມາໃຫ້ແກ່ຫມູ່ຄົນ.

ແທ່ງ ເອງຮູ້ສຶກວ່າ ຫວງວຽນຈາຍ ໄດ້ຂຽນກາບກອນເຫຼົ່ານີ້ຫ່າງຈາກນີ້ ບໍ່ດົນ ບາງທີຄວາມວ່ານີ້ເທົ່ານັ້ນ ຫາກບໍ່ແມ່ນວ່າເກືອບຮອດຫ້າສະຕະວັດກ່ອນມານີ້.

ນັກກະວີຕາບອດ ຫວງວຽນດິງຈຽວ ໄດ້ປຸກລະດົມໃຫ້ຫົວໃຈຂອງທຸກຄົນ ເກີດຄວາມຮູ້ສຶກອັນດີງາມທີ່ສຸດ: ຄວາມຮັກປະເທດຊາດ, ນ້ຳໃຈຄຽດແຄ້ນ ຕໍ່ພວກກົດຂີ່ຂົ່ມເຫັງ. ເພີ່ນເປັນນັກກະວີຄົນທຳອິດທີ່ໄດ້ຊົມເຊີຍການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ ຝະລັ່ງ ຂອງປະຊາຊົນຫວຽດນາມ.

ແທ່ງດຳລົງຊີວິດຢູ່ທ່າມກາງບັນຍາກາດແຫ່ງຄວາມຄິດທາງອິດສະຫລະພາບທີ່ເສຍໄປແລ້ວຂອງປະເທດຊາດ, ໃນຂະນະດຽວກັນ ທ້າວນ້ອຍກໍ່ນິຍົມຊົມຊອບວິລະກຳ ຂອງບັນດາວິລະຊົນ ຊຶ່ງບໍ່ຍອມກົ້ມຫົວໃຫ້ສັດຕູຜູ້ຮຸກຮານ. ຢູ່ບ້ານກິມລຽນນີ້ເອງ ມີຫລາຍສິ່ງຫລາຍຢ່າງທີ່ເຕືອນຄວາມຊົງຈຳເຖິງການສູ້ລົບໃນເວລາຜ່ານມາ ແລະ ເຖິງບັນດາວິລະຊົນຜູ້ພິລະອາດຫານ. ຢູ່ໃກ້ເຮືອນ ແທ່ງ ມີສະນ້ອຍຫນ້ອຍຫນຶ່ງເອີ້ນຊື່ວ່າ ສະນົກຍາງ , ມີດອກບົວສີອິດ ບານເຮື່ອຢູ່ເທິງຫນ້ານ້ຳ. ພວກຜູ້ເຖົ້າໃນບ້ານມັກເລົ່າເລື່ອງ ສູ່ພວກລູກຫລານຟັງວ່າ: ຊາວປີກ່ອນຫນ້ານີ້ ເວືອງຖຸກເມົ້າ ຜູ້ເກັ່ງກ້າ ຊຶ່ງເປັນຄົນໃນບ້ານນີ້ກໍໄດ້ເສຍຊີວິດຢ່າງບໍ່ກັບມາອີກຢູ່ໃຕ້ສະແຫງນີ້. ເພື່ອຕອບສະຫນອງຕາມຄຳຮຽກຮ້ອງຂອງບັນດາຜູ້ນຳຂະບວນການ "ເກີນເວືອງ" ເວືອງຖຸກເມົ້າ ໄດ້ຈັດຕັ້ງກອງຫລອນຂຶ້ນຫນຶ່ງກອງ ຊຶ່ງມີສະມາຊິກຫລາຍສົມຄວນ ໂດຍຕັ້ງຊື່ວ່າ "ເພື່ອຄວາມຈົງຮັກພັກດີຕໍ່ພົນທະ", ກອງຫລອນດັ່ງກ່າວໄດ້ບຸກໂຈມຕີພວກຮຸກຮານຢ່າງກ້າຫານ. ບັ້ນສູ້ຮົບສຸດທ້າຍໃນຊີວິດ ຂອງເພີ່ນ ໄດ້ເກີດຂຶ້ນຢູ່ໃນກະໂຕເສັ້ນທາງໃນບ້ານເພີ່ນເອງ. ເມື່ອຖືກທະຫານສັດຕູ ຈັບໄດ້ ເພີ່ນສາບແຊ່ງພວກມັນ. ແລ້ວໂດດລົງສະທັງໆທີ່ມືທັງສອງເບື້ອງຖືກມັດແປ້ນຫລັງ ແລະ ສິ້ນຊີວິດຢູ່ສະແຫງນັ້ນ.

ຮວາງຊວນແຄງ "ຜູ້ລິຊາຜາກິດ" ເປັນລູກຂອງແມ່ແທ່ງ ແລະ ເປັນຄົນ ບ້ານດຽວກັນ, ເພີ່ນໄດ້ຮັບຄວາມເຄົາລົບນັບຖືຈາກຊາວບ້ານກິມລຽນ. ເພີ່ນໄດ້ຕໍ່ສູ້ ຢ່າງອາດຫານມາຫລາຍປີ ຢູ່ໃນຖັນແຖວກອງກຳລັງລຸກຮື້ຂຶ້ນຂອງ ຮວາງຮວາຖາມ. ພາຍຫລັງມາເພີ່ນໄດ້ກັບມາຢູ່ບ້ານເກີດ ແລະ ຖືກຈັບຢູ່ແຫ່ງດັ່ງກ່າວ. ເພີ່ນຖືກສັດຕູທໍລະມານ ຢ່າງໂຫດຮ້າຍປ່າເຖື່ອນ ຢູ່ທີ່ສຳນັກງານຂອງເຈົ້າແຂວງ ເງອານ. ເພີ່ນທົນສູ້ໂດຍບໍ່ຍອມສົ່ງສຽງເວົ້າແມ່ນແຕ່ຄວາມດຽວ. ຍ້ອນເຈັບປວດຢ່າງຮຸນແຮງ ເພີ່ນຈຶ່ງກັດແຂ້ວຈົນວ່າ ຕັດ

ປາຍລົ້ນຂອງຕົນເອງ. ພວກສັດຕູສິ່ງເພິ່ນໄປຂັງຢູ່ເກາະມໍລະມະ ປູໂລ-ໂກນດາວ. ເມື່ອໜົດກຳນົດເຣັດວຽກສັບພະທຸກແລ້ວ ເພິ່ນໄດ້ກັບຄືນມາຢູ່ບ້ານເກີດ. ເຖິງແມ່ນວ່າເພິ່ນປາກກືກ ຮ່າງກາຍພິການຢ່າງທໍລະມານ ແຕ່ເພິ່ນແມ່ນຄົນທີ່ມີຈິດໃຈຈົງຮັກພັກດີຄົນໜຶ່ງ ໃນຈຳນວນປັນຍາຊົນ ຢູ່ຊົນນະບົດທີ່ມີນ້ຳໃຈຮັກປະເທດຊາດ.

ນັບວ່າເປັນເທື່ອທຳອິດ ທີ່ທ້າວນ້ອຍ ແທ້ງ ໄດ້ຟັງພໍ່ເລົ່າເລື່ອງ ກ່ຽວກັບຍາດຕິພີ່ນ້ອງ ແລະ ໄທບ້ານດຽວກັນ ຜູ້ທີ່ມີຊື່ສຽງໂດ່ງດັງ, ກ່ຽວກັບບັນດາວິລະຊົນ ທີ່ເຕັມໄປດ້ວຍນ້ຳໃຈອາດຫານຂອງປະເທດຊາດ, ກ່ຽວກັບປະເທດຫວຽດນາມ ທີ່ສະຫງ່າລາສີ ໃນອະດີດ ແລະ ກ່ຽວກັບ ປະເທດຫວຽດນາມ ທີ່ກຳລັງເຈັບປວດທໍລະມານໃນປະຈຸບັນ. ເລື່ອງເຫລົ່ານັ້ນ ໄດ້ປະຮອຍລະລຶກໄວ້ ຢ່າງເລິກເຊິ່ງ ຢູ່ໃນວິນຍານຂອງທ້າຍນ້ອຍ ແທ້ງ.

ເຊັ່ນດຽວກັນກັບໝູ່ຄູ່ ແທ້ງ ພະຍາຍາມຊອກຮູ້ໂລກແວດລ້ອມ ດ້ວຍຕົນເອງ. ພວກເຂົາໄດ້ຮູ້ໄດ້ເຫັນຫລາຍສິ່ງຫລາຍອັນ. ເຫດການອັນໂດ່ງດັງ ຈຳນວນຫລວງຫລາຍ ໄດ້ເກີດຂຶ້ນ ໃນສະໄໝກ່ອນພຸ້ນ ຢູ່ຕາມສອງຟາກຝັ່ງແມ່ນ້ຳລາມ ບ່ອນທີ່ພວກເດັກເຫລົ່ານີ້ ໄດ້ລົງອາບຢູ່ໃນກະແສນ້ຳ ເພື່ອປົດເປື້ອງຄວາມຮ້ອນອົບເອົ້າ ຂອງລະດູແລ້ງ. ພໍແຕ່ພວກເດັກນ້ອຍປີນຂຶ້ນໄປຈອມພູຈູງ ອັນສູງຊັນຊຶ່ງຕົນລາມໄປຕິດຈອດກັບແຄມແມ່ນ້ຳເທົ່ານັ້ນ ໂລກມະຫັດສະຈັນໜ້ອຍນີ້ ກໍຈະປະກົດຕົວຢູ່ຕໍ່ໜ້າ ພວກເຂົາ.

ຢູ່ໃກ້ໆພຸ້ນ ຖ້າຫລຽວໄປທາງທິດເໜືອ ຈະແນມເຫັນໂພນໜ້ອຍໜຶ່ງ ຂຽວອຸ່ມທຸ່ມ ຊຶ່ງປະຊາຊົນທຳມະດາສາມັນ ເລົ່າສືບກັນມາວ່າ ນັ້ນຄືບ້ານເກີດ ເມືອງນອນຂອງນາຍຮັກເດ ຜູ້ນຳຄົນໜຶ່ງ ໃນບັນດາຜູ້ນຳການລຸກຮືຂຶ້ນໃຫຍ່ທີ່ສຸດ ຂອງຊາວນາທີ່ຕາມ ການຄອບຄອງ ຂອງຈັກກະພັດ " ຫຽນຈຽວ " ອັນເປັນຊື່ທີ່ ພວກສັກດີນາຈີນໄດ້ຮຽກປະເທດຕົນເອງຢ່າງຈອງຫອງ. ການລຸກຮືຂຶ້ນຄັ້ງນັ້ນ ໄດ້ເກີດຂຶ້ນໃນ ປີ ກ໔໔ ຂອງຄິດຕະສັກກະຫລາດ ແລະ ຍາດເອົາໄຊຊະນະມາໄດ້ ໂດຍຂັບໄລ່ໄທຫົວພວກຣຸກຮານ ທີ່ມາຈາກທິດເໜືອ ໃຫ້ອອກຈາກປະເທດຫວຽດນາມ ເປັນເວລາຊົ່ວຄາວ.

ຢູ່ອີກຟາກໜຶ່ງຂອງແມ່ນ້ຳລາມ ກົງກັນຂ້າມກັບພູຈູງນັ້ນ ແມ່ນບ້ານເກີດ ເມືອງນອນຂອງ ຟານດິງຟູ່ງ. ຄວາມຊົງຈຳກ່ຽວກັບການຕໍ່ຊະນະ ໃນການຈັບອາວຸດລຸກຮືຂຶ້ນ

ພາຍໃຕ້ການນຳພາຂອງພໍ່ເຖົ້າ ຍັງບໍ່ຈາງຫາຍໄປຈັກເທື່ອ ຈົນເທົ່າວັນນີ້ ບໍ່ວ່າຜູ້ອາຈຸໂສຄົນໃດກໍສາມາດເລົ່າສູ່ພວກຫລານທີ່ມັກຂອກຮູ້ກ່ຽວກັບການຕໍ່ຊະນະດັ່ງກ່າວ. ຜ່ານເລື່ອງເຫລົ່ານັ້ນ ພວກຫລານຈຶ່ງຮູ້ວ່າ ພວກລາວເມືອງຂົມມີຄວາມສະຫ້ານຢ້ານກົວ ແລະ ຊິງຊັງຜູ້ຮັກຊາດທີ່ເກັ່ງກ້າ ຢ່າງຮຸນແຮງຖຶງຂັ້ນໃດ. ເມື່ອພໍ່ເຖົ້າເສຍຊີວິດ ຍ້ອນການເຈັບຢ່າງກະທັນຫັນ ບັນດາເພື່ອນຮ່ວມລົບໄດ້ທຳການຍົກຍ້າຍຊາກສົບພໍ່ເຖົ້າມາຝັງ ຢູ່ທີ່ບ້ານເກີດເມືອງນອນຂອງເພິ່ນ. ສັດຕູກໍໄດ້ຂຸດຊາກສົບພໍ່ເຖົ້າຂຶ້ນມາ, ຈັດການຈູດ ຈົນກະດູກມຸ່ນເປັນຂີ້ເຖົ່າ, ຕໍ່ຈາກນັ້ນ ເອົາມາປົນກັບຫມີ່ລູກປືນ ແລ້ວກໍຍິງຖິ້ມເພື່ອລົບລ້າງທຸກຮ່ອງຮອຍຂອງວິລະຊົນ ເພື່ອວ່າໃນພາຍຫນ້າພວກລູກຫລານຈະບໍ່ມີຫຍັງອີກໄວ້ ເປັນສິ່ງເຄົາລົບນັບຖື.

ຫ່າງຈາກນີ້ເລັກຫນ້ອຍໄປທາງຕອນໃຕ້ ແມ່ນບ້ານເກີດຂອງ ຫງວຽນກົງຈື ຊຶ່ງເປັນຄົນທຳອິດທີ່ໄດ້ແຕ່ງກອນລຳໃນວົງການກະວີຫວຽດນາມ. ບໍ່ໄກຈາກບ້ານນີ້ ແມ່ນບ້ານເກີດຂອງ ຫງວຽນຢູ່ ນັກກະວີຜູ້ຍິ່ງໃຫຍ່.

ສາຍນ້ຳໄຫລໄປເລື້ອຍໆ ບິດກ່ຽວວົນວຽນໄຫລຜ່ານບ້ານ ຖາຍສາ ຊຶ່ງແມ່ນບ້ານເກີດເມືອງນອນຂອງ ກວາງຈູງ. ຊື່ດັ່ງກ່າວລື່ງຫູປະຊາຊົນຫວຽດນາມທຸກໆຄົນຕັ້ງແຕ່ເດັກນ້ອຍຫາຜູ້ໃຫຍ່ ຊື່ດັ່ງກ່າວເຮັດໃຫ້ຫົວໃຈຂອງຄົນຫວຽດນາມຫມົດທຸກຄົນ ລົ້ນປ່ຽມລົ້ນໄປດ້ວຍຄວາມເອກອ້າງໃນຊາດຂອງພວກເຂົາເຈົ້າ. ກວາງຈູງ ແມ່ນຜູ້ນຳພາການລຸກຮື້ຂຶ້ນຂອງຊາວນາ ຈົນໄດ້ຮັບໄຊຊະນະ, ຢູ່ໃນພົງສາວະດານໄດ້ໃຫ້ຊື່"ອະນອນການຂອງອ້າຍນ້ອງໄຕເຊີນ". ກວາງຈູງ ຍັງປະຊື່ສຽງອັນໂດ່ງດັງ ອະມະຕະໄວ້ດ້ວຍຜົນງານສູ້ຮົບດຸເດືອດໃນລະດູບານໃຫມ່ປີ ໑໗໘໙ ໃນເວລາເພິ່ນໄດ້ນຳເອົາກອງກຳລັງລຸກຮື້ຂຶ້ນຂອງຊາວນາໄປບຸກເຂົ້ານະຄອນຫລວງທັງລອງ (ນະຄອນຫລວງຮ່າໂນ້ຍ ໃນປະຈຸບັນນີ້) ບ່ອນມີຖືກກຳລັງທະຫານຂອງພວກສັກດີນາຈີນບຸກລຸກ ຢ່າງບັງອາດ ແລະ ຍຶດຄອງ ພຽງແຕ່ໃນເວລາຫ້ານັ້ນເທົ່ານັ້ນ ກວາງຈູງ ໄດ້ຕີທັບມ້າງກຳລັງທະຫານ ສັດຕູຊຶ່ງມີກຳລັງເຖິງສອງແສນຄົນ ແລະ ບຸກເຂົ້າປົດປ່ອຍທັງລອງ. ປະຫວັດສາດ ຫວຽດນາມໄດ້ຂຽນໄວ້ວ່າ: ພວກຮຸກຮານທີ່ມາຈາກພາກເຫນືອ ມີຄວາມຢ້ານກົວ ທະຫານກວາງຈູງ ຜູ້ເກັ່ງກ້າຈົນອົກສັ່ນຂວັນເສຍ ພວກເຂົາຈຶ່ງປົບຫນີອອກຈາກຫວຽດນາມດັ່ງນັ້ນ ຄວາມພະຍາຍາມຄັ້ງສຸດທ້າຍຂອງພວກສັກດີນາຈີນ ທີ່ຢາກຈະໃຊ້ອາວຸດ ເພື່ອເຮັດໃຫ້ປະຊາຊົນຫວຽດນາມຜູ້ຮັກຫອມອິດສະຫລະພາບ ແລະ ບໍ່ຍອມຈຳນົນ ຢູ່ໃຕ້ ອຳ

ນາດພວກເຂົາເຈົ້າ ຈຶ່ງພິນາດລົງຢ່າງໜ້າອັບອາຍຂາຍໜ້າຄືແນວນີ້. ຫງວຽນເຕິດແທ່ງ ບໍ່ເຄີຍໄປຮ່າໂນ້ຍຈັກເທື່ອ ແຕ່ກໍມີຄົນເລົ່າສູ່ທ້າວນ້ອຍຟັງວ່າ ເພື່ອລະນຶກເຖິງໄຊຊະນະອັນຍິ່ງໃຫຍ່ຂອງ ກວາງຈູງ ຄົນຮຸ່ນຫລັງໄດ້ປຸກຫໍບູຊາໄວ້ເທິງບໍລິເວນໂນນດົງດາ ຊຶ່ງເປັນບ່ອນດຳເນີນການສູ້ຮົບຄັ້ງປະຫວັດສາດດັ່ງກ່າວ.

ພວກເດັກນ້ອຍມັກປີນຂຶ້ນໄປຫລິ້ນຢູ່ເທິງໂພນນ້ອຍໜ່ວຍນັ້ນ ໃນປ່າໄມ້ອັນດົກໜາຕາມໂນນ ມີແຜ່ນຫີນທີ່ຖືກຊຸກເຊື່ອງໄວ້ເປັນແຜ່ນຫີນໝື່ນອນກ້ຽງຍ້ອນຟ້າຝົນ. ສິ່ງນັ້ນຄືຮ່ອງຮອຍເສດເຫລືອຂອງປ້ອມໝັ້ນເກົ່າແກ່. ບັນດາປ້ອມໝັ້ນເຫລົ່ານັ້ນ ຖືກກໍ່ສ້າງຂຶ້ນໂດຍເຈົ້າຊີວິດ ໂຮ່ກວີລີ ແລະ ໂຮ່ຫານເທືອງ ໃນຕົ້ນສະຕະວັດທີ ໑໕ ເພື່ອສະກັດກັ້ນເສັ້ນທາງຍົກທັບມຸ່ງລົງໄປທາງໃຕ້ຂອງລາດຊະວົງຜູ້ຮຸກຮານ.

ຖັດຈາກນັ້ນມາ ເລເລີ້ຍ ລູກຂອງຄົນຫາປາ ໄດ້ຢຽບຢ່າງເຂົ້າມາ ໃນດິນແດນແຫ່ງນີ້. ຢູ່ໃນປຶ້ມປະຫວັດສາດສະໄໝກ່ອນ ທີ່ມີຊື່ວ່າ "ຫລັກໝາຍອັນສຳຄັນ ຂອງປະຫວັດສາດຫວຽດນາມ ຖືກຂຽນຂຶ້ນຕາມລາຊະໂອງການຂອງເຈົ້າຊີວິດ "ມີບາງຕອນຂຽນວ່າ", ເລເລີ້ຍ ໄດ້ມາຮອດເຂດນີ້ພ້ອມດ້ວຍກອງທະຫານຂອງເພິ່ນ. ເພິ່ນຖືກຕ້ອນຮັບຢ່າງສຸດອົກສຸດໃຈຈາກປະຊາຊົນ ແລະ ໄດ້ຮັບຄວາມເຄົາລົບນັບຖື ຈາກພວກເຂົາເຈົ້າ ເພາະວ່າບໍ່ມີໃຜຄາດຄິດມາກ່ອນວ່າຕົນຈະໄດ້ມີໂອກາດເບິ່ງ ວິລະຊົນຜູ້ຍິ່ງໃຫຍ່ ແລະ ມີກຽດຂອງປະເທດຊາດ. ທັງເຖົ້າແກ່ ແລະ ເດັກນ້ອຍ, ທັງຜູ້ຊາຍ ແລະ ແມ່ຍິງ ຊ່ວງເສັງກັນເອົາຄວາຍ ງົວ ເຂົ້າ ເຫລົ້າຢາປາປີ້ງມາລ້ຽງຕ້ອນຮັບບັນດາ ນັກຮົບ". ເລເລີ້ຍ ໄດ້ສ້າງປ້ອມໝັ້ນຈຳນວນໜຶ່ງຢູ່ເຂດນີ້. ນັກລົບອາສາສະໝັກພາກັນຫລັ່ງໄຫລມາຈາກທຸກສາລະທິດ ເພື່ອມາຫາປ້ອມດັ່ງກ່າວ. ເມື່ອເຕົ້າໂຮມກັນໄດ້ ແລ້ວພວກເຂົາກໍເລີ່ມສ້າງກອງທັບຂຶ້ນກອງໜຶ່ງ. ໃນເບື້ອງຕົ້ນ ເລເລີ້ຍ ຄວບຄຸມແຂວງເງ່ອານ ເສຍກ່ອນ ຈາກນັ້ນ ເພິ່ນຈຶ່ງນຳພາກອງທັບຂອງຕົນໄປທາງທິດເໜືອ ຊຶ່ງເປັນຈຸດທີ່ໝັ້ນຂອງທະຫານຮຸກຮານຈີນ ແລ້ວກໍຕີທັບມ້າງພວກຮຸກຮານ ແລະ ປົດປ່ອຍທົ່ວປະເທດ.

ເມື່ອໄດ້ຮູ້ກ່ຽວກັບໂສມໜ້າຂອງປະຫວັດສາດອັນສະຫວ່າງສະໄຫວຂອງປະເທດຊາດ, ແທ່ງ ກໍຄິດເຖິງຄຳຖາມອັນເຈັບປວດ ທີ່ເພິ່ນເຄີຍຖາມພໍ່ ແຕ່ບັດນີ້ ແທ່ງ ອາດຕອບດ້ວຍຕົນເອງໄດ້: ຕ້ອງບໍ່ປະໃຫ້ເປັນໄປຕາມສະພາບຄືແນວນັ້ນເດັດຂາດ, ປະເທດຫວຽດນາມເຄີຍມີໄລຍະທີ່ຮຸ່ງເຮືອງ ແລະ ມີບັນດາວິລະຊົນຜູ້ຍິ່ງໃຫຍ່. ເກືອບພັນປີ ທີ່

ພວກສັກດິນາຈີນໃຫຍ່ໄດ້ຜັດປ່ຽນກັນ ມາປົກຄອງ ແຕ່ປະຊາຊົນຫວຽດນາມ ກໍບໍ່ຍອມຈຳນົນ ແລະ ໄດ້ສືບຕໍ່ລຸກຂຶ້ນຕັດຊຸກໂສ້ຂ້າທາດທີ່ໜ້າໜ່າຍແໜງທີ່ສຸດ. ແນ່ນອນແລ້ວວ່າມາບັດນີ້ ຄົງຈະມີວິລະຊົນບໍ່ໜ້ອຍກວ່າສະໄໝກ່ອນ. ຂາດແຕ່ປັດໃຈໜຶ່ງເທົ່ານັ້ນຄືວ່າບໍ່ມີກຳລັງອັນແຂງແກ່ນມາເຕົ້າໂຮມສາມັກຄີເຂົາເຈົ້າ ແລະ ມອບອາວຸດໃຫ້ ພວກເຂົາເຈົ້າຕັດສິນໄຊຊະນະ.

ລຸງດ່ຽນ ເປັນຄົນ ທີ່ພວກໜຸ່ມນ້ອຍໃນບ້ານເຄົາລົບນັບຖືຫລາຍທີ່ສຸດ. ລຸງມີມືສອງເບື້ອງອັນແຂງແຮງ ຂອງຊ່າງຕີເຫລັກຄົນໜຶ່ງ ທີ່ສືບທອດມາຈາກພໍ່. ແທ້ງ ເອງກໍ່ມັກແລ່ນໄປຫລິ້ນຢູ່ໂຮງຕີເຫລັກຂອງລຸງ ຊຶ່ງຕັ້ງຢູ່ໃກ້ໆ ເພື່ອເບິ່ງວ່າລຸງຈັບຄ້ອນຕີ ອັນໜັກດ້ວຍຄວາມຄ່ອງມືໄດ້ແນວໃດ. ບາງຄັ້ງ ແທ້ງຍັງໄດ້ຊ່ວຍວຽກລຸງເປັນຕົ້ນແມ່ນສູບເຕົາ ທັງມີຄວາມທະນຶງໃຈຢູ່ກັບວຽກສຳຄັນທີ່ລຸງມອບໃຫ້ເຮັດດ້ວຍຄວາມເຊື່ອໝັ້ນ. ມື້ເທື່ອໜຶ່ງ ແມ່ນຕອນແລງຂອງລະດູແລ້ງ ເມື່ອລົມຮ້ອນເຊົາໂຊຍພັດມາ ຄວາມຮ້ອນອົບເອົ້າຈາງຫາຍໄປ ພວກເດັກນ້ອຍໃນຄຸ້ມບ້ານພາກັນມາປິ້ນອ້ອມລຸງດ່ຽນ. ຈຸດພິເສດຂອງລຸງດ່ຽນ ແມ່ນຢູ່ບ່ອນວ່າ ເພິ່ນຮູ້ຈັກນິທານຫລາຍ ແລະ ມັກເລົ່າສູ່ພວກເດັກນ້ອຍຟັງ. ກ່ອນຈະເລົ່າ ລຸງເດີນໄປຈັບເອົາບັ້ງສູບຢາ ທີ່ດບາດຍາວໆ ທັງພັບຕາຍາບໆ ເນັ່ງຕົວເລັກນ້ອຍ ທັງຕາກໍແນມເບິ່ງຄວັນຢາທີ່ພົ່ນອອກຈາກປາກ. ຈາກນັ້ນລຸງກໍເລີ່ມເຂົ້າເນື້ອເລື່ອງ:

"ຢູ່ຮ່າໂນ້ຍ ມີໜອງແຫ່ງໜຶ່ງງາມທີ່ສຸດ. ພວກຜູ້ເຖົ້າແຕ່ປາງກ່ອນໄດ້ຕັ້ງຊື່ໃຫ້ມັນວ່າ ໜອງຮວານກຽມ (ດາບວິເສດ). ຢູ່ກາງໜອງເພິ່ນໄດ້ກໍ່ທາດເກົ້າແກ່ ຂຶ້ນໜຶ່ງໜ່ວຍ ເອີ້ນຊື່ວ່າ: ທາບຮົວ (ເຕົ່າ). ເລື່ອງລາວຂອງໜອງ ຮວານກຽມ ແລະ ທາບຮົວ ໄດ້ຕິດພັນກັບເລື່ອງແປກປະຫລາດເລື່ອງໜຶ່ງ. ເລື່ອງມັນເກີດຂຶ້ນ ແຕ່ດຶກດຳບັນພຸ້ນ, ຄືບົນແຜ່ນດິນຕອນນີ້ຍັງບໍ່ມີພວກຝະລັ່ງ ແຕ່ຫາກມີພວກສັກດິນາຈີນ. ປະຊາຊົນເຮົາບໍ່ຍອມດຳລົງຊີວິດແບບຂ້າທາດ, ພວກເຂົາຈັບອາວຸດອອກສູ່ສະໜາມຮົບ ພົນຄົນເປັນຄືໃຈດຽວ. ເລເລີ້ຍ ວິລະຊົນຜູ້ຍິ່ງໃຫຍ່ຂອງຊາດໄດ້ນຳພາພວກເຂົາເຈົ້າ. ສົງມະຫັດສະຈັນໄດ້ເຮັດໃຫ້ວິລະຊົນດັ່ງກ່າວກາຍເປັນຜູ້ຊະນະເລີດ. ຄັ້ງໜຶ່ງ ເລເລີ້ຍ ກຳລັງຂີ່ເຮືອຫລິ້ນຢູ່ໃນໜອງ ໃນທັນໃດນັ້ນ ມີເຕົ່າໃຫຍ່ໂຕໜຶ່ງໂປ່ໂລ່ຫົວຂຶ້ນ ປາກຄາບດ້າມດາບຄຳເຫລື້ອມຍິບຍັບ. ເຕົ່າໄດ້ເວົ້າຂຶ້ນວ່າ: "ຮັບເອົາດາບນີ້ໄວ້ສາ. ມີດາບ

24/VII
ຫ້າມຈຳໜ່າຍ

ແລ້ວຄົນນັ້ນຈະສາມາດຕີຊະນະບໍ່ວ່າສັດຕູໂຕໃດ".

ເລເລີຍ ກໍຮັບເອົາດາບນັ້ນໄວ້ ແລະ ແຕ່ນັ້ນມາ ເພິ່ນກໍໄດ້ຮັບແຕ່ໄຊຊະນະຕະຫລອດເວລາ. ທະຫານຂອງເພິ່ນມີຢູ່ແຫ່ງໃດ, ແຫ່ງນັ້ນທະຫານຮຸກຮານຕ່າງດ້າວຕ້ອງຕາຍເດຍລະດາດຄືຕໍເຟືອງ. ໃນທີ່ສຸດ ປະເທດທີ່ແສນຮັກຂອງພວກເຮົາກໍໄດ້ຮັບອິດສະຫລະພາບ, ຫລັງຈາກໄດ້ຮັບໄຊຊະນະແລ້ວ ເລເລີຍ ພ້ອມດ້ວຍເສນາອາມາດ ໄດ້ກັບຄືນມາຫນອງອີກ ເພື່ອຕອບແທນບຸນຄຸນຂອງເຕົ່າ. ເວລາເຮືອຂອງເພິ່ນອອກມາ ຮອດກາງຫນອງ ທຸກຄົນຕ່າງກໍແປກໃຈທີ່ສຸດ ເມື່ອແນມເຫັນດາບບິນອອກຈາກຝັກຢ່າງກະທັນຫັນ. ພ້ອມດຽວກັນນັ້ນ ເຕົ່າກໍໄດ້ໂປໂລຂຶ້ນ ແລະ ຄາບດາບມຸດລົງພົ້ນຫນອງ. ແຕ່ນັ້ນມາ ຫນອງນີ້ກໍຖືກເອີ້ນວ່າ ຫນອງຮວານກຽມ. ມີຜູ້ເລົ່າວ່າ ປະຈຸບັນ ເຕົ່າຍັງມີຊີວິດຢູ່ໃນຫນອງນີ້ ແລະ ຍັງຮັກສາດາບວິເສດດວງນັ້ນໄວ້ຢູ່. ຍັງມີຄົນເວົ້າວ່າ ຖ້າປະຊາຊົນເຮົາໄດ້ພົບໄພອັນຕະລາຍ, ແນ່ນອນວ່າຈະຕ້ອງມີຜູ້ເກັ່ງກ້າປະກົດຕົວຂຶ້ນ ແລະ ເຈົ້າຂອງອະພິນິຫານຈະມອບດາບວິເສດຂອງ ເລເລີຍ ໃຫ້ແກ່ຜູ້ເກັ່ງກ້າຄົນນັ້ນ ເພື່ອຂັບໄລ່ທະຫານສັດຕູຄືນໃຫມ່".

ໂດຍພະຍາຍາມຊອກວິທີຫາຄຳຕອບຕໍ່ບັນຫາທີ່ສ້າງຄວາມກະວົນກະວາຍໃຫ້ ແກ່ເພິ່ນ ແທ່ງ ຈຶ່ງທວນຄືນເລື່ອງຂອງລຸງດຽນ ແລະ ຄິດຫຸ່ມໆໃນໃຈວ່າ: "ເປັນຂອງທຳມະດາ, ເລື່ອງນັ້ນ ເປັນເລື່ອງທີ່ເລົ່າສືບຕໍ່ກັນມາແຕ່ບູຮານນະການ, ແຕ່ໃນ ຄວາມເປັນຈິງແນ່ນອນຕ້ອງມີອັນໃດອັນຫນຶ່ງຊ່ວຍ ເລເລີຍ ໃນການປຸກລະດົມມະຫາຊົນລຸກຂຶ້ນຕໍ່ສູ້ ແລະ ຕີຊະນະສັດຕູໂຕໂຫດຮ້າຍສາມານ".

໓

ເສັ້ນທາງທີ່ພາໄປເຖິງປ້ອມຫມັ້ນອັນເກົ່າແກ່ ທີ່ປ່ເພ,ບ່ອນທີ່ ແທ່ງ ພ້ອມດ້ວຍຫມູ່ເພື່ອນມັກມາຫລິ້ນນຳກັນເປັນປະຈຳ, ເສັ້ນທາງນີ້ຕັດຜ່ານບ້ານດານຍຽມ ອັນເປັນບ້ານເກີດເມືອງນອນຂອງ ຟານໂບ້ຍເຈົາ ຜູ້ທີ່ເກັ່ງກ້າສາມາດ. ແທ່ງ ໄດ້ຮູ້ຈັກ ມັກແກ່ວນກັບເພິ່ນ ເພາະວ່າເພິ່ນເປັນຫມູ່ດຽວກັບພໍ່ຂອງ ແທ່ງ ແລະ ເພິ່ນເຄີຍ ມາຢາມເຮືອນ ແທ່ງ ທີ່ຢູ່ບ້ານ ດອກບົວ.

ຄາວນັ້ນ ຊາຕາຊີວິດອັນແປກປະຫລາດ, ຄວາມສາມາດ ແລະ ພອນສະຫວັນ-ຂອງ ຟານໂບ້ຍເຈົາ ເປັນທີ່ເລື່ອງລືໄປທົ່ວສາລະທິດ. ໃນປີ ໑໙໐໐ ໃນບົນສອບເສັງຄັດເລືອກຢູ່ ເວ້, ເພິ່ນສາມາດສອບເສັງໄດ້ອັນດັບໜຶ່ງ ແລະ ໄດ້ຮັບນາມມະຍົດເປັນໄຊຫງວຽນ ເຊິ່ງເປັນຂັ້ນຂັ້ນດິດລະດັບສູດຍອດ ທີ່ມອບໃຫ້ແກ່ ຟານໂບ້ຍເຈົາ ຜູ້ດຽວເທົ່ານັ້ນ. ເສັ້ນທາງເຂົ້າຮັບຕຳແໜ່ງອັນມີກຽດໄດ້ເປີດກ້ວາງລໍຮັບຢູ່ແລ້ວ ແຕ່ວ່າເພິ່ນໄດ້ປະຕິເສດຢ່າງເດັດດ່ຽວ ບໍ່ຍອມຮັບໃຊ້ພະລາຊະບັນລັງ ທີ່ທໍາລະຍົດສິດຜົນປະໂຫຍດຂອງປະຊາຊົນ ແລະ ຕັດສິນໃຈອຸທິດຊີວິດຂອງເພິ່ນໃຫ້ແກ່ການເຄື່ອນໄຫວປະຕິວັດ.

ຟານໂບ້ຍເຈົາ ເດີນທາງໄປທົ່ວທຸກແຫ່ງຫົນຢູ່ເລື້ອຍໆ, ເພິ່ນພົບພໍ້ບັນດາຂາລາຊະການທີ່ມີນໍ້າໃຈຮັກຊາດ ບັນດາປັນຍາຊົນ ແລະ ນັກຮຽນຜູ້ກ້າວໜ້າ. ໃນຖານະ ທີ່ຕົນເປັນຂັ້ນດິດຊຸ້ນທີໜຶ່ງ, ເພິ່ນພະຍາຍາມດູດດຶງເອົາບັນດາເສນາອາມາດ ທີ່ບໍ່ເຫັນດີນຳນະໂຍບາຍຕ້ານຊາດຂອງເຈົ້າຊີວິດ ຫງວຽນ ໃຫ້ມາເຂົ້າຮ່ວມໃນການຕໍ່ສູ້ກູ້ຊາດ . ບຸກຄົນສຳຄັນຕົ້ນຕໍໃນຈຳນວນດັ່ງກ່າວ ແມ່ນເຈົ້າຟ້າ ເກືອງເດ. ຟານໂບ້ຍເຈົາ ໄດ້ພົບປະກັບເກືອງເດ ຢ່າງສະໜິດສະໜົມ. ເດືອນພຶດສະພາປີ ໑໙໐໔ ເພິ່ນໄດ້ ສ້າງຕັ້ງອົງການລັບໜຶ່ງ ໃຫ້ຊື່ວ່າ "ສະມາຄົມຢຸຍເຕີນ" ("ສະມາຄົມ ເພື່ອປ່ຽນແປງໃໝ່") ໂດຍແມ່ນເກືອງເດ ເປັນຫົວໜ້າ. ຢູ່ທີ່ກອງປະຊຸມສ້າງຕັ້ງ ບັນດາສະມາຊິກຂອງສະມາຄົມໄດ້ຜ່ານມະຕິທີ່ຕົກລົງໃຫ້ເລີ່ມກະກຽມລຸກຮືຂຶ້ນປະກອບອາວຸດຕ້ານພວກລ່າເມືອງຂຶ້ນ ທີ່ມຸ່ງຈຸດປະສົງຟື້ນຟູລະບອບລາຊາທິປະໄຕອັນແທ້ຈິງຢູ່ຫວຽດນາມ. ຢູ່ກອງປະຊຸມຍັງໄດ້ລົງມະຕິຮຽກຮ້ອງໄປຍັງປະເທດຍີ່ປຸ່ນ ທີ່ໄກແສນໄກ ເພື່ອຂໍການຊ່ວຍເຫລືອ.

ສົງຄາມລະຫວ່າງລັດເຊຍ ກັບ ຍີ່ປຸ່ນ ມີຜົນສະທ້ອນອັນໃຫຍ່ຫລວງຕໍ່ທາງເລືອກຂອງ ຟານໂບ້ຍເຈົາ ແລະ ບັນດາເພື່ອນຮ່ວມຮົບຂອງເພິ່ນ. ໂດຍບໍ່ຄາດຝັນ ປະເທດມະຫາອຳນາດທີ່ຍິ່ງໃຫຍ່ຄືປະເທດລັດເຊຍ ຂອງພະເຈົ້າຊາ ຊຳພັດປະລາໄຊ ໃຫ້ປະເທດໜຶ່ງໃນທະວີບອາຊີ ຊຶ່ງເປັນປະເທດຂະໜາດກາງ ແລະ ໃນເຕິງສະຕະວັດກ່ອນນັ້ນ ກໍບໍ່ເຂັ້ມແຂງລື່ນປະເທດຫວຽດນາມເທົ່າໃດ, ນອກນັ້ນ ຍັງເກືອບກາຍເປັນເມືອງຂຶ້ນຂອງພວກລ່າເມືອງຂຶ້ນຈາກທະວີບເອີລົບອີກດ້ວຍ. ຄົນທະວີບອາຊີ ສາມາດ ຊະນະຄົນທະວີບເອີລົບໄດ້ເຊັ່ນກັນ, ນັ້ນຄືຂໍ້ສະຫລຸບທີ່ບັນດານັກຊາດນິຍົມຫວຽດນາມ ໄດ້ຍົກຂຶ້ນ.

ແທ່ງ ເຄົາລົບນັບຖື ຟາມໂບ້ຍເຈົາ ຫລາຍທີ່ສຸດ. ນອກຈາກເປັນຕົວແທນ ທີ່ດີເດັ່ນ ໃຫ້ແກ່ຊົນຊັ້ນປັນຍາຊົນແລ້ວ ຟາມໂບ້ຍເຈົາ ກໍ່ຍັງເປັນຄົນຫນຶ່ງ ທີ່ມີໄສງ່າຍໆ. ໃນເວລາທີ່ ຟາມໂບ້ຍເຈົາ ໄດ້ມາຢ້ຽມຢາມພໍ່ຂອງ ແທ່ງ ໂດຍມາຜູ້ດຽວ ຫລື ພ້ອມດ້ວຍຫມູ່ຄູ່, ແທ່ງຕັ້ງໃຈຟັງ ແຕ່ລະຖ້ອຍຄຳ ທີ່ພວກເພິນລົມກັນ. ຟາມໂບ້ຍເຈົາ ມັກອ່ານບົດກອນ ຂອງນັກກະວີ ໂບຮານຈີນ ຄື ຕຽວເປືອງ. ເວົ້າລວມແລ້ວ ຢູ່ໃນຫວຽດນາມ ເມື່ອກ່ອນນີ້ ການແຕ່ງກາບກອນ ແມ່ນວຽກປະຈຳ ຂອງພວກຄົນທີ່ມີລະດັບການສຶກສາສູງ. ເລື່ອງນີ້ ກໍ່ແມ່ນມາຈາກຈຸດພິເສດຂອງພາສາຫວຽດນາມ ອັນເປັນພາສາຫນຶ່ງ ທີ່ຮັ່ງມີດ້ານທຳນອງສຽງ, ງ່າຍທາງດ້ານສຳຜັດ ຕະຫລອດທັງດ້ານ ມູນເຊື້ອວັນນະຄະດີອັນມີມາແຕ່ບູຮານນະການ ຂອງວົງການເຈົ້າຂຸນມູນນາຍ ສັກດີນາຫວຽດນາມ. ເຖິງແມ່ນວ່າ ຂຽນດ້ວຍແບບກະວີໂບຮານກໍຕາມ ແຕ່ບົດກະວີຂອງ ຟາມໂບ້ຍເຈົາ ກໍຍັງມີລົມຫາຍໃຈ ແຫ່ງຍຸກສະໄຫມທີ່ເຊື່ອມຊຶມໄປດ້ວຍນ້ຳໃຈຮັກຊາດ ແລະເຕັມໄປດ້ວຍຈິດໃຈສູ້ຮົບຢ່າງພິລະອາດຫານ.

ຢ່ວງເຂົ້າຕົ້ນປີ ໑໙໐໕ ຫງວຽນເຕິດແທ່ງ ໄດ້ພົບພໍ່ເຖົ້າ ຟາມໂບ້ຍເຈົາ ເປັນເທື່ອສຸດທ້າຍ. ແຕ່ວັນນັ້ນມາ ນັບໄດ້ອີກປີເຄິງແລ້ວ ທີ່ພໍ່ເຖົ້າ ຟາມໂບ້ຍເຈົາ ບໍ່ໄດ້ຢູ່ໃນບ້ານເກີດອີກເລີຍ. ມີຂ່າວຊ່າລືວ່າ ພໍ່ເຖົ້າ ຟາມໂບ້ຍເຈົາ ໄດ້ໄປຕ່າງປະເທດ , ອາດໄປປະເທດຍີ່ປຸ່ນ. ແຕ່ວ່າ ໃນຕອນທ່ຽງວັນຫນຶ່ງຂອງເດືອນກໍລະກົດ ອາກາດມື້ນັ້ນຮ້ອນອົບເອົ້າ ຂະນະທີ່ກຳລັງນອນຢູ່ເທິງອູ່ໃນສວນ ແທ່ງ ເຫັນຄົນເຄີຍຮູ້ຈັກຍ່າງ ເຂົ້າມາໃນຮ່ອມ.

"ມະຫາບັນດິດ ຢູ່ເຮືອນບໍ່ ? " ນີ້ຄືຄວາມເວົ້າທຳອິດ ທີ່ແຂກຜູ້ຊຶງຫາກໍ ຍ່າງເຂົ້າມາຮອດປະຕູ ຖາມພວກເດັກນ້ອຍ. ແຂກຄົນນັ້ນ ບໍ່ແມ່ນຜູ້ອື່ນ ທີ່ແທ້ແລ້ວແມ່ນ ພໍ່ເຖົ້າຟາມໂບ້ຍເຈົາ ນັ້ນເອງ.

" ພໍ່ພວກຫລານມີວຽກເຂົ້າໄປໃນເມືອງ ບາງທີເພິນອາດຈະຢູ່ດົນເຕີບ ຈຶງຈະກັບ", ອ້າຍຄຽນຂອງແທ່ງ ເປັນຜູ້ຕອບ.

" ລູງມີວຽກຢາກເວົ້ານຳພວກຫລານ. ໂອຕາຍ ! ແທ່ງຫວະນີ້ ? ໃຫຍ່ໄວແທ້ເນາະ. ເປັນບ່າວແລ້ວເດ ".

ຟານໂບ້ຍເຈົາ ທັງເວົ້າທັງຕົບບ່າໄຫລ່ແທ່ງດ້ວຍຄວາມສະໜິດສະໜົມ. ແທ່ງ ເປັນສີເກີງເຂີນໆວາດໃດວາດໜຶ່ງ ເຖິງວ່າມີອາຍຸພຽງ ໑໘ ປີກໍຕາມ, ແຕ່ເບິ່ງຄືສູງ ໃຫຍ່ຫລາຍແລ້ວ.

"ລູງຫາກໍກັບມາແຕ່ຍີ່ປຸ່ນ. ຢູ່ພູ້ນ, ລູງໄດ້ພົບບັນດາເສນາອາມາດ ຂອງເຈົ້າຈີ ວິດແລ້ວຍັງໄດ້ພົບບັນດາຕົວແທນຜູ້ກ້າວໜ້າຂອງຈີນເຊິ່ງໄດ້ຫລົບໄພອອກຈາກປະເທດ. ລູງຄິດວ່າ ຫລານຄົງຈະເຄີຍໄດ້ຍິນຊື່ຂອງ ຄາງ ຢິວແວ ແລະ ລຽນລີເຈົາ *. ລູງ ຍັງໄດ້ໂອ້ລົມກັບ ຊຸນຍັດເຊັນ ບັນດິດຜູ້ໜຸ່ມນ້ອຍ ທີ່ທັງເປັນດາລາດວງໃໝ່ ຂອງຂະ ບວນການຮັກຊາດຈີນ. ບັນດາເພື່ອນມິດຍີ່ປຸ່ນ ແລະ ຈີນ ສະໜັບສະໜູນສຸດຈິດສຸດໃຈ ຕໍ່ພາລະກິດອັນເປັນທຳ ຂອງປະຊາຊົນເຮົາທີ່ຖືກທໍລະມານ ຍ້ອນຕົກຢູ່ໃນສະພາບ ເປັນ ຂ້າທາດ. ຊາວອາຊີທັງໝົດລ້ວນແຕ່ເປັນໃຈຝ່າຍເຮົາ. ແຕ່ຢາກອັບໄລ່ ພວກຕາເວັນ ຕົກທີ່ເປັນໜ້າລັງກຽດໃຫ້ອອກໜີນັ້ນ ມັນຈຳເປັນຕ້ອງມີຄົນທີ່ມີການສຶກສາ, ຮູ້ຈັກວຽກ ງານ. ລູງຕົກລົງເລືອກເອົາຊາວໜຸ່ມຈຳນວນໜຶ່ງ ທີ່ມີມານະເກົ່ງກາດສົ່ງໄປຮ່ຳຮຽນ ຢູ່ຕາມໂຮງຮຽນຕ່າງໆ ທີ່ຍີ່ປຸ່ນ. ຄິດໄປຄິດມາ ລູງຈຶ່ງຄິດອອກວ່າ ຊາວໜຸ່ມ ທີ່ຈະຖືກ ຄັດເລືອກເປັນຜູ້ທຳອິດ ຕ້ອງແມ່ນຫລານສອງຄົນນີ້ ຊຶ່ງເປັນລູກຊາຍຂອງມະຫາ ບັນດິດ ບ້ານດອກບົວ. ເປັນແນວໃດ ? ພວກຫລານເຕັມໃຈໄປນຳລູງບໍ່ ?"

ສອງອ້າຍນ້ອງຕັ້ງໃຈຟັງແຂກຜູ້ມີຊື່ສຽງໂດ່ງດັງ. ເມື່ອມາຮອດປະໂຫຍກ ສຸດ ທ້າຍ ທັງສອງຈຶ່ງໄຕ່ຕອງຢ່າງຮອບຄອບ ທັງແນມເບິ່ງໜ້າກັນ, ຈາກນັ້ນກໍກົ້ມໜ້າລົງ ຢູ່ມິດງຽບ.

"ຖ້າຫາກພວກຫລານໄດ້ເຫັນວ່າປະເທດຍີ່ປຸ່ນ ເປັນປະເທດທີ່ຍິ່ງໃຫຍ່ຂະໜາດ ໃດ !", ຟານໂບ້ຍເຈົາ ເວົ້າຕໍ່ດ້ວຍຄວາມກະຕືລືລົ້ນ, "ໃນບັນດາປະເທດ ຂອງ ຄົນຜິວເຫລືອງທັງໝົດ, ມີປະເທດຍີ່ປຸ່ນປະເທດດຽວ ເປັນມະຫາອຳນາດ ທີ່ຍິ່ງ ໃຫຍ່. ມີແຕ່ປະເທດ ຍີ່ປຸ່ນ ທີ່ມີກຳລັງພຽງພໍເທົ່ານັ້ນ ຈຶ່ງຈະຊ່ວຍພວກເຮົາ ຟື້ນ ຟູ ພື້ນຖານລາຊາທິປະໄຕອັນເຂັ້ມແຂງ ແລະ ລັກສະນະຊາດອັນແທ້ຈິງໄດ້. ຖ້າບໍ່

---

* ຄາງຢິວແວ ແລະ ລຽນລີເຈົາ ແມ່ນນັກປະຕິຮູບແບບນາຍທຶນ, ຜູ້ທີ່ຕໍ່ສູ້ ເພື່ອສ້າງ ລະບອບລາຊາທິປະໄຕພາຍໃຕ້ ລັດຖະທຳມະນູນຢູ່ຈີນ ແລະ ດຳເນີນການປະຕິຮູບແບບ ບໍ່ເລິກເຊິ່ງໃນທ້າຍສະຕະວັດທີ I9.

3–546

ມີການຊ່ວຍເຫລືອຈາກພາຍນອກແລ້ວ ພວກເຮົາກໍຈະບໍ່ສາມາດຮັດວຽກຫຍັງໄດ້ເລີຍ. ປະຈຸບັນ ບັນດານັກຮັກຊາດອັນແທ້ຈິງຂອງປະເທດຫວຽດນາມ ຕ້ອງຫັນໄປ ກ້ຳຕາເວັນອອກສຽງເໜືອ, ໄປກ້ຳຈັກກະພັດອາທິດຊູໄທ".

ເມື່ອອ້າຍບໍ່ສະແດງຄວາມຂັດຂ້ອງ ແທ່ງ ຈຶ່ງເວົ້າຂຶ້ນວ່າ: "ລູງຟານ ທີ່ນັບຖື! ພວກຫລານຂອບໃຈຢ່າງສູງຕໍ່ການສະເໜີຂອງລູງ. ແຕ່ວ່າ ພວກຫລານຈະປ່ອຍພໍ່ໃຫ້ຢູ່ໃນສະພາບໂດດດ່ຽວໄດ້ຊັ້ນບໍ ? ລູງກໍຮູ້ແລ້ວເດວ່າ ພໍ່ພວກຫລານມີສຸຂະພາບອ່ອນເພຍຫລາຍ. ອີກປະການໜຶ່ງ ພວກຫລານກໍບໍ່ມີສິດຕັດສິນໃຈບັນຫາສຳຄັນຄືແນວນີ້ໄດ້ ໃນເມື່ອຍັງບໍ່ທັນໄດ້ຖາມຄຳເຫັນຂອງພໍ່ຫລານ, ພວກຫລານເອງ ກໍບໍ່ຮູ້ວ່າເວລາໃດ ພໍ່ຈະກັບມາ.

"ລູງເຂົ້າໃຈ, ລູງເຂົ້າໃຈແລ້ວ. ບໍ່ໄຊ່ວ່າຈະໄປດ່ຽວນີ້ໂລດ ຈຶ່ງພິຈາລະນາຄຳສະເໜີຂອງລູງເນີ".

ແນ່ນອນວ່າ ແທ່ງ ຕ້ອງອາໄສຍາມພໍ່ບໍ່ຢູ່ນີ້ ເພື່ອປະຕິເສດຄຳສະເໜີ ຂອງຟານໂບ້ຍເຈົາ. ແຕ່ອັນນັ້ນ ບໍ່ແມ່ນເຫດຜົນທີ່ຊ່ວຍເອົາອ້າຍໄວ້, ແນ່ນອນ ເມື່ອມີອາຍຸໄດ້ ໑໕ ປີແລ້ວ ແມ່ນຍາກທີ່ຈະຫັກຫ້າມຄວາມມຸ່ງຫວັງ ທີ່ຢາກໄປເຫັນ ບັນດາປະເທດ ຫ່າງໄກ. ແທ່ງ ເຄົາລົບນັບຖື ຟານໂບ້ຍເຈົາ ຢ່າງສູງ, ແຕ່ແຜນການຂອງພໍ່ເຖົ້າ ບໍ່ແທດເໝາະ ກັບແນວຄິດຈິດໃຈຂອງ ແທ່ງ. ລູງຟານ ຜູ້ໜ້ານັບຖືເອີຍ ຈະຮ່ວມມືກັບໃຜນໍ ດຳເນີນການປົດປ່ອຍປະເທດຊາດ ? ຈະອາໄສເສນາອາມາດ ທີ່ມືດທຶບ ແລະ ບັນດາຂ້າລາຊະບໍລິພານ ຂອງເຈົ້າຊີວິດ ທີ່ລູງອອກແຮງຊັກຊວນພວກເຂົາເຈົ້າ ມາຢູ່ໃນສະມາຄົມຂອງຕົນ ຈະໄດ້ຫລືບໍ່ ? ແຕ່ໃນຕົວຈິງແລ້ວ ໃນສະໄໝທີ່ ຝະລັ່ງ ເປັນຜູ້ປົກຄອງ ພວກເຂົາເຈົ້າເຫລົ່ານີ້ ມີຊີວິດຢູ່ຢ່າງສະໜຸກສະໜານຕາມລຳພັງໃຈ.

ຄວາມຫວັງຂອງ ຟານໂບ້ຍເຈົາ ທີ່ຢາກອີງໃສ່ການຊ່ວຍເຫລືອຂອງຍີ່ປຸ່ນ ເພື່ອປົດປ່ອຍປະເທດຊາດໃຫ້ຫລຸດພົ້ນຈາກແອກຄອບຄອງຂອງພວກຕາເວັນຕົກນັ້ນໄດ້ເຮັດໃຫ້ແທ່ງສົງໄສ. ບໍ່ແມ່ນເລື່ອງບັງເອີນທີ່ປະຊາຊົນສາມັນເວົ້າວ່າ: ບໍ່ມີຫຍັງຊົ່ວຮ້າຍ ເທົ່າ "ໄລ່ໝາປ່າອອກທາງປະຕູຫລັງ, ຕ້ອນຮັບເສືອດາວເຂົ້າທາງປະຕູໜ້າ", ສຸພາສິດຂອງປະຊາຊົນສາມັນ ຍາມໃດກໍຖືກຕ້ອງ.

ຄວາມສັງຫອນໃຈຂອງ ແຫ້ງ ແມ່ນບໍ່ຜິດຈັກດີ້. ຕໍ່ມາບໍ່ດົນ ຊີວິດຕົວຈິງໄດ້ເຮັດໃຫ້ພາບລວງຕາຂອງ ຟານໂບ້ນເຈົາ ແຕກສະຫລາຍເປັນຄວັນເມກຫມອກ ເສຍແລ້ວ. ແນ່ນອນວ່າ ພວກຈັກກະພັດ ຜູ້ໂຫດຮ້າຍຄືສັດປ່າ ຈະຕ້ອງສົມຮູ້ຮ່ວມຄິດກັນ ເວລາໃດທີ່ການເຄື່ອນໄຫວຂອງຊາວຜູ້ຮັກຊາດຫວຽດນາມຢູ່ຍີ່ປຸ່ນກາຍເປັນອັນຕະລາຍສູງສຸດ. ໃນປີ ໑໙໐໘ ອີງຕາມຄຳຂໍຮ້ອງຂອງຝະລັ່ງ ລັດຖະບານຍີ່ປຸ່ນຕົກລົງໃຈຍຸບເລີກທຸກໆ ອົງການຈັດຕັ້ງຂອງນັກຮຽນຫວຽດນາມຢູ່ຍີ່ປຸ່ນໂດຍແມ່ນພໍ່ເຖົ້າຟານໂບ້ຍເຈົາ ເປັນຜູ້ສ້າງຕັ້ງ. ໃນນັ້ນທັງຟານໂບ້ຍເຈົາ ແລະ ເກືອງເດ້ ພ້ອມດ້ວຍບັນດາຜູ້ທີ່ເຂົ້າຮ່ວມໃນ ອົງການຈັດຕັ້ງຮັກຊາດຕ່າງໆ ກໍຖືກເນລະເທດອອກຈາກຍີ່ປຸ່ນເຊັ່ນກັນ.

ຄົນຊັ້ນຕ້ອງເຮັດຫຍັງແດ່ ? ເສັ້ນທາງປົດປ່ອຍຢູ່ໃສ ? ບາງທີ ທັດສະນະຂອງຟານຈູງຈິງ, ດາວດວງເດັ່ນຫນ່ວຍໃຫມ່ທີ່ປະກົດຕົວຂຶ້ນເທິງທ້ອງຟ້າອັນມືດມິດ ຂອງປະເທດຫວຽດນາມເມືອງຂຶ້ນໃນເວລານັ້ນ ອາດຈະຖືກຕ້ອງ ? ພໍ່ຂອງແຫ້ງແມ່ນຄົນຫນຶ່ງທີ່ໄດ້ຜ່ານການສອບເສັງພ້ອມກັນກັບ ຟານຈູຈິງ ເພິ່ນໄດ້ເວົ້າສູ່ຟັງຫລາຍຄັ້ງ ຫລາຍຄາວກ່ຽວກັບຜູ້ວິເສດຄົນໃຫມ່ນີ້. ຕ່າງກັບຟານໂບ້ຍເຈົາ ຟານຈູຈິງ ເປັນຄົນທີ່ເປັນປໍລະປັກກັບລາຊະບັນລັງຢ່າງຮຸນແຮງ ແລະ ຕໍ່ສູ້ເພື່ອສ້າງຕັ້ງລະບອບສາທາລະນະລັດຂຶ້ນ ຢູ່ຫວຽດນາມ. ແຕ່ວ່າເພິ່ນມອງບໍ່ເຫັນວ່າ ມີຫຍັງຊົ່ວຮ້າຍຢູ່ໃນການປົກຄອງຂອງພວກລ່າເມືອງຂຶ້ນ ສະນັ້ນ ເພິ່ນຈຶ່ງບໍ່ໄດ້ຮຽກຮ້ອງໃຫ້ທຳການຕໍ່ສູ້ຕ້ານພວກເຂົາ, ຫາກພຽງແຕ່ຮຽກຮ້ອງນຳພວກເຂົາໃຫ້ດຳເນີນການປະຕິຮູບທາງເສດຖະກິດ–ສັງຄົມເທົ່ານັ້ນ.

ແຫ້ງ ພະຍາຍາມຊອກຫາຄຳຕອບຕໍ່ຄຳຖາມທີ່ລົບກວນຈິດໃຈນັ້ນ ຢູ່ຕາມປຶ້ມຕ່າງໆ ແຕ່ວ່າແຫ້ງກໍຊອກບໍ່ພົບ. ເທື່ອຫນຶ່ງ ແຫ້ງ ພົບປຶ້ມທີ່ຫນ້າສົນໃຈຫົວຫນຶ່ງ ຢູ່ໃນຕູ້ປຶ້ມຂອງພໍ່. ນັ້ນຄືປຶ້ມຂອງນັກປະພັນຝະລັ່ງ ຊັງສັກ ຣູດໂຊ. ປຶ້ມເຫລັ້ມນີ້ສັບສົນແດ່ ອ່ານກໍຍາກຫລາຍ ມີບາງບ່ອນແຫ້ງບໍ່ເຂົ້າໃຈເລີຍ, ແຕ່ໃນແຕ່ລະຫນ້າ ແຫ້ງ ໄດ້ຊອກເຫັນສັດຈະທຳທີ່ງ່າຍດາຍ ແຕ່ຍິ່ງໃຫຍ່ ເຫມືອນກັບໄຂ່ມຸກທີ່ຈົມຢູ່ພື້ນມະຫາສະຫມຸດ, ສັດຈະທຳດັ່ງກ່າວປຸກລະດົມຄວາມຕື່ນຕົວຂຶ້ນຢູ່ໃນຈິດໃຈຂອງແຫ້ງ. ຢູ່ໃນປຶ້ມຂຽນໄວ້ວ່າ ຄົນເຮົາເກີດມາຕ້ອງມີອິດສະຫລະພາບ ແຕ່ວ່າຢູ່ບ່ອນໃດກໍຍັງມີຄົນຖືກຜູກມັດ ດ້ວຍສາຍໂສ້ເມື່ອບໍ່ມີອິດສະຫລະພາບ ຍ່ອມຫມາຍຄວາມວ່າ ສູນເສຍຄວາມເປັນຄົນ ແລະ ສິດທິຂອງຄົນ; ຖ້າປະຊາຊົນສາມາດທັບມ້າງແອກຄອບຄອງໄດ້ ການກະທຳດັ່ງກ່າວແມ່ນຖືກຕ້ອງ. ຈາກຄວາມຄິດກະແຈກກະຈາຍດັ່ງກ່າວ ແຫ້ງໄດ້ສັງລວມເປັນໂຄງການເພື່ອປະຕິບັດ ,

ເປັນໂຄງການຕໍ່ສູ້ເພື່ອອິດສະຫລະພາບ. ນ້ຳໃຈຮັກອິດສະຫລະພາບ ແນວຄິດອິດສະຫຼະ ຄວາມຊິງຊັງລັດທິ ແລະ ຄຳພີດັ້ງເດີມ, ອະເທບນິຍົມຢ່າງຮຸນແຮງທີ່ບັນຈຸຢູ່ໃນປຶ້ມຂອງຄົນຝະລັ່ງຜູ້ຍິ່ງໃຫຍ່ ໄດ້ເຮັດໃຫ້ແທ້ງອັດສະຈັນໃຈ. ຄວາມຮຽກຮ້ອງອັນແຮງກ້າໃຫ້ຕໍ່ສູ້ເພື່ອອິດສະຫລະພາບ ສະເໝີພາບ ແລະ ພາລະດອນພາບ ເຮັດໃຫ້ແທ່ງ ຕື່ນເຕັ້ນ. ແທ່ງໄດ້ຖາມຕົນເອງວ່າ ເປັນຫຍັງຈຶ່ງແມ່ນກະໂຕເພື່ອນຮ່ວມຊາດຂອງ ຣູດໂຊ ເອງທີ່ເປັນຜູ້ຂູດຮີດປະຊາຊົນຫວຽດນາມທີ່ໄດ້ຮັບເຄາະກຳຢ່າງປ່າເຖື່ອນ ? ຈະສາມາດປ່ຽນແປງລະບອບທີ່ໜ້າລັງກຽດນັ້ນໄດ້ຫລືບໍ ?

ຈະຫາດວງດາບອັນສັກສິດຂອງສັດຈະທຳທີ່ມີອຳນາດໄດ້ຢູ່ບ່ອນໃດ. ສັດຈະທຳອັນທີ່ອາດຈະຊີ້ຊ່ອງທາງປົດປ່ອຍໃຫ້ແກ່ປະຊາຊົນທີ່ແສນຮັກທີ່ເປັນລູກຫລານພະຍາລາຊະສີ, ທັງເປັນປະຊາຊົນທີ່ມີມູນເຊື້ອພິລະອາດຫານ ແລະ ສົມກຽດທີ່ຈະພົບກັບຊີວິດອັນຈົບງາມຫລາຍກວ່າຊີວິດອັນຮ້າຍກາດທີ່ປະຫວັດສາດປະໄວ້ໃຫ້ແກ່ເຂົາ. ຈາກນີ້ໄປ ຄວາມໝາຍໃນຊີວິດຂອງແທ່ງ ແມ່ນການອຸທິດຕົນຕໍ່ສູ້ ເພື່ອອິດສະຫລະພາບ ແລະ ບາກບັ່ນຊອກໃຫ້ພົບເສັ້ນທາງກູ້ຊາດ.

໔

ໃນທ້າຍປີ ໑໙໐໔ ຫງວຽນຊິງສັກ ໄດ້ຮັບພະລາຊະໂອງການຈາກລາຊະວັງໃຫ້ຮີບຟ້າວເຂົ້າເວ້ ໂດຍດ່ວນ ເພື່ອຮັບຕຳແໜ່ງເປັນເສນາອາມາດ. "ມະຫາບັນດິດ " ໄດ້ເອົາລູກຊາຍທັງສອງຄົນໄປພ້ອມ ປະແຕ່ລູກສາວໄວ້ຢູ່ເຮືອນ. ໃນໜຶ່ງສະຕະວັດກ່ວາຜ່ານມາ ນະຄອນເວ້ເປັນເມືອງທີ່ບໍ່ໃຫຍ່ໂຕປານໃດ ແລະ ຕັ້ງຢູ່ພາກກາງ ທັງເປັນເມືອງທີ່ປະທັບຂອງເຈົ້າຊີວິດຫວຽດນາມ. ພະລາຊະວັງ ແລະ ວັດວາອາຮາມເກົ່າແກ່ພັນຂົນຍາວຢຽດຢູ່ຕາມໂນນພູຂຽວຊຸ່ມພຸ່ມຕາມສອງຟາກຝັ່ງແມ່ນ້ຳເຮືອງ(ແມ່ນ້ຳທີ່ມີກິ່ນຫອມ)ອັນເປັນໜຶ່ງໃນຈຳນວນແມ່ນ້ຳງາມທີ່ສຸດຂອງຫວຽດນາມ. ມີນິທານທີ່ເລົ່າວ່າ ແມ່ນ້ຳມີຊື່ຄືແນວນີ້ກໍເພາະວ່າມັນອອກບໍ່ມາແຕ່ປ່າໄມ້ແປກຢູ່ເທິງສາຍພູຫລວງ ຊຶ່ງເປັນບ່ອນເກີດພືດເປັນຢາທຸກຊະນິດ ເມື່ອພືດປະສົມເຂົ້າກັບນ້ຳ ເຮັດໃຫ້ເກີດກິ່ນຫອມ.

ເມື່ອມາຮອດເວ້ ແທ່ງ ແລະ ອ້າຍໄດ້ເຮັດຄຳຮ້ອງຂໍເສັງເຂົ້າຮຽນຢູ່ໂຮງຮຽນປະຖົມດົງບາ ທີ່ຫາກໍ່ສ້າງຂຶ້ນໃໝ່ ຂອງອຳນາດການປົກຄອງລ່າເມືອງຂຶ້ນຝະລັ່ງ. ວິຊາ

ຕົ້ນຕໍຢູ່ໃນໂຮງຮຽນດັ່ງກ່າວແມ່ນພາສາຝະລັ່ງກັບວັນນະຄະດີຝະລັ່ງ. ສອງປີຕໍ່ມາ ເດັກທັງສອງໄດ້ເສັງຈົບຊັ້ນໂຮງຮຽນແຫ່ງນີ້ ແລະ ເສັງເຂົ້າຮຽນຕໍ່ຢູ່ວິທະຍາໄລ ແຫ່ງຊາດກວັກລຶກໄດ້ສຳເລັດ.

ວິທະຍາໄລແຫ່ງຊາດຕັ້ງຢູ່ຕຶກ ທີ່ໃນເມື່ອກ່ອນ ເປັນທີ່ພັກຂອງລາຊະນາວີ. ຢູ່ເທິງປະຕູໃຫຍ່ທີ່ເຮັດດ້ວຍໄມ້ແດງ ມີທໍລອຍສັງເກດການແລະ ແຂວນລະຄັງນ້ອຍຫນ່ວຍຫນຶ່ງ ຊຶ່ງຄືກັນກັບລະຄັງທົ່ວໄປຕາມວັດວາອາຣາມຕ່າງໆ. ຕາມທາງເຂົ້າອອກ ສອງຂ້າງມີຮູບປັ້ນໂຕມັງກອນສອງໂຕເວີຍຫົວຊຶກງຶກ ເຮັດດ້ວຍດິນກະເບື້ອງເຄືອບ.

ວິທະຍາໄລແຫ່ງຊາດ ຈັດວ່າເປັນໂຮງຮຽນທີ່ດີທີ່ສຸດຢູ່ຫວຽດນາມໃນສະໄຫມນັ້ນ ສັບ "ແຫ່ງຊາດ" ນັ້ນ ມີຄວາມຫມາຍວ່າໂຮງຮຽນແຫ່ງນີ້ເປີດຮັບເອົາຄົນຫວຽດນາມຊຶ່ງບໍ່ພຽງແຕ່ຢາກຮັບເອົາການສຶກສາແບບຕາເວັນຕົກເທົ່ານັ້ນ ແຕ່ຫາກ ຍັງຢາກຮັບ ເອົາການສຶກສາຕາມແບບຂອງຫວຽດນາມອີກດ້ວຍ. ດັ່ງນັ້ນ ທາງໂຮງຮຽນຈຶ່ງສອນດ້ວຍພາສາປະຈຳຊາດ ຊຶ່ງເປັນພາສາຫວຽດ ແຕ່ຂຽນເປັນອັກສອນລາແຕັງ ຊຶ່ງເລີ່ມແຕ່ຕົ້ນສະຕະວັດທີ ໔໐ ໄດ້ຖືກປ່ຽນມາຈາກຕົວຫນັງສືຈີນ. ພ້ອມດຽວກັນຍັງມີຫ້ອງຮຽນພິເສດ ທີ່ສອນຕາມມູນເຊື້ອບູຮານຫວຽດນາມ.

ໃນຊຸມປີທຳອິດ ພໍ່ຄ້າຝະລັ່ງຊື່ ນັອກເດັງ ທຳຫນ້າທີ່ເປັນຫົວຫນ້າໂຮງຮຽນ. ເຂົາແຕ່ງງານກັບຄົນຫວຽດນາມ ເວົ້າພາສາຫວຽດນາມ ແລະ ອະນຸຍາດໃຫ້ເອີ້ນຊື່ຕົນຕາມສຳນຽງຫວຽດ ຄື ໂງເດເມີນ. ຜູ້ມາປ່ຽນເຂົາ ແມ່ນນາຍທະຫານຄົນຫນຶ່ງ ສັງກັດຢູ່ໃນກອງທະຫານຕ່າງດ້າວຝະລັ່ງຊື່ວ່າ ທ່ານ ໂລຊູ. ຊຶ່ງເປັນສິ່ງທີ່ບັນດາຜູ້ຮັກຊາດຫວຽດນາມນຳມາເປັນເລື່ອງເຍາະເຍີຍຫລິ້ນ. ໂລຊູ ເຄີຍເຂົ້າຮ່ວມຢູ່ໃນການຕໍ່ສູ້ ຕ້ານກັບກອງຫລອນຂອງຮ່ວາງຮວາຖາມ ແລະ ໄດ້ຖືກຈັບເປັນຊະເລີຍເສິກ ແລະ ຖືກຈຳຄຸກເປັນເວລາຫລາຍເດືອນໃນຄ້າຍຂອງກອງຫລອນທີ່ຕັ້ງຢູ່ປ່າດົງ. ເຫມືອນກັບ ກອງຫລອນຄົນອື່ນ, ເຂົາຍ່າງຕີນເປົ່າ ຫາບນ້ຳ ຕຳເຂົ້າ. ເລື່ອງທີ່ ຮ່ວາງຮວາຖາມ ບັງຄັບ "ພະນະທ່ານຫນັງຂາວ" ໃຫ້ອອກແຮງງານຈົນອາບເຫື່ອ ໄດ້ດັງແຜ່ລາມໄປ ຢ່າງກວ້າງຂວາງໃນຫມູ່ປະຊາຊົນ ແລະ ເຮັດໃຫ້ບັນດາຊາວຫນຸ່ມຮັກຊາດພໍອົກພໍໃຈທີ່ສຸດ.

ພໍແຕ່ເຂົ້າຮຽນຢູ່ວິທະຍາໄລແຫ່ງຊາດ ແທ່ງເຂົ້າໃຈໂລດວ່າ ຫນ້າທີ່ຕົ້ນຕໍທີ່ ອຳນາດປົກຄອງລ່າເມືອງຂຶ້ນບົ່ງອອກໃຫ້ທາງໂຮງຮຽນນັ້ນບໍ່ແມ່ນການກໍ່ສ້າງຄົນໃຫ້ມີລະດັບການສຶກສາສູງ, ເພື່ອຮັບໃຊ້ປະຊາຊົນ, ຮັບໃຊ້ປະເທດຊາດ, ແຕ່ຫາກແມ່ນ ການກໍ່

ສ້າງລູກແຫລ້ງຕືນມີທີ່ຈົງຮັກພັກດີຕໍ່ພວກລ່າເມືອງຂຶ້ນ, ອາໄສພວກຕືນມີດັ່ງກ່າວ ພວກລ່າເມືອງຂຶ້ນຈຶ່ງຈະປົກຄອງໄດ້ຢ່າງງ່າຍດາຍ. ລະບຽບແບບຂ້ອຍຂ້າທີ່ຄອງງຳຢູ່ທົ່ວທະຍາໄລແຫ່ງນີ້ບໍ່ເຂົ້າແກັບເຂົ້າເກຍກັບຈິດໃຈຢາກມີອິດສະຫລະພາບຂອງແຫ່ງ.

ຊຸມປີການສຶກສາຂອງແຫ່ງ ແມ່ນກົງກັບໄລຍະປະຫວັດສາດໂລກ ຊຶ່ງ ວ.ອິ.ເລນິນໄດ້ນິຍາມໄວ້ ວ່າເປັນການເລີ່ມຕົ້ນຕື່ນຂຶ້ນຂອງອາຊີ. ຍ້ອນຜົນສະທ້ອນຂອງການປະຕິວັດລັດເຊຍ ປີ ໑໙໐໕ ຫລາຍປະຊາຊາດຢູ່ພາກຕາເວັນອອກໄດ້ລຸກຂຶ້ນ. ຂະບວນການປົດປ່ອຍຊາດກໍໄດ້ເລີ່ມຕົ້ນເກີດຂຶ້ນຢູ່ຫວຽດນາມນີ້ເອງ.

ຖ້າວ່າບັນຍາກາດຢູ່ໃນວິທະຍາໄລອຶດອັດແລະຫນ້າເບື່ອຫນ່າຍແລ້ວ, ຢູ່ຕາມທ້ອງຖະຫນົນຊໍ້າພັດກຳລັງເກີດມີເຫດການຟົດເດືອດຜິດປົກກະຕິອັນເຮັດໃຫ້ຈິດໃຈແຫ່ງ ແລະ ຫມູ່ເພື່ອນທ້ອງດຽວກັນຈຳນວນຫນຶ່ງຟົດຟື້ນຂຶ້ນ. ລະດູບານໃຫມ່ປີ ໑໙໐໗ ແມ່ນເວລາທີ່ເຮັດໃຫ້ແຫ່ງບໍ່ມີຍາມລືມໄດ້. ມັນແມ່ນເວລາທີ່ແຫ່ງຮຽນຮູ້ບົດຮຽນຕົວຈິງອັນທຳອິດກ່ຽວກັບການຕໍ່ສູ້ທາງການເມືອງ. ບັນດາຜູ້ທີ່ສະຫນັບສະຫນູນຟານໂບຍເຈົາໄດ້ເປີດ ຂັ້ນຮົບ "ເພື່ອປ່ຽນແປງແບບແຜນດຳລົງຊີວິດ ແລະຮີດຄອງຂອງປະຊາຊົນ" ຢູ່ໃນທົ່ວປະເທດ. ທຸກໆບ່ອນຜູ້ຊາຍທີ່ຈົ່ງຜົມຈຸກຍາວແບບຈີນຈະຖືກຕັດຜົມ. ແຕ່ລະຄົນບອກກັນຕໍ່ໆໄປວ່າໃຫ້ນຸ່ງຫົ່ມແບບທັນສະໄຫມ ໃຊ້ເຄື່ອງໃຊ້ທີ່ຜະລິດໄດ້ຢູ່ພາຍໃນປະເທດ ປະຖິ້ມຮີດຄອງ ປະເພນີສະໄຫມບູຮານ ເປີດໂຮງຮຽນທີ່ໃຊ້ພາສາຫວຽດ ສ້າງຕັ້ງບໍລິສັດຄ້າຂາຍ ໂດຍຄົນຫວຽດນາມເອງ. ບັນດາຜູ້ທີ່ເຂົ້າຮ່ວມຂະບວນການເພື່ອປ່ຽນແປງໄດ້ແຈກໃບປິວ ຢູ່ທົ່ວທຸກແຫ່ງ ເຜີຍແຜ່ຢ່າງໂຈ່ງແຈ້ງເລື່ອງການເກັບພາສີອັນຫນັກຫນ່ວງຂອງອຳນາດ ການປົກຄອງທ້ອງຖິ່ນ ແລະຮຽກຮ້ອງໃຫ້ທຸກຄົນບໍ່ຍອມເສຍສ່ວຍ. ຄວາມວຸ້ນວາຍແຜ່ກະຈາຍໄປທົ່ວຫວຽດນາມພາກກາງ. ຊາວນາບັບເປັນພັນໆຄົນທີ່ຫລັ່ງໄຫລມາຈາກເມືອງຕ່າງໆມຸ່ງຫນ້າເຂົ້າສູ່ນະຄອນຫລວງເວ້. ຢູ່ຕາມເສັ້ນທາງເຂົ້າສູ່ນະຄອນຫລວງ ບັນດາຜູ້ທີ່ເຂົ້າຮ່ວມຂະບວນການເພື່ອປ່ຽນແປງ ໄດ້ຕັ້ງຈຸດພິເສດຂຶ້ນ, ຢູ່ບ່ອນນີ້ເຂົາໄດ້ບັງຄັບໃຫ້ຕັດຜົມສັ້ນ ແລະຫົ່ມເສື້ອສັ້ນ. ຊາວນາຈຳນວນຫນຶ່ງໄດ້ພາກັນມາຫມົດທັງຄອບຄົວ,ເອົາຫມໍ້ ເຂົ້າ, ສາດ,ຟືນເຂົ້າມາໃນເມືອງນຳ. ພວກເຂົາເຈົ້າໄດ້ປຸກຕູບຢູ່ເທິງຂົວ ຈາງຕຽນຂ້າມແມ່ນ້ຳເຮືອງ ຢູ່ອ້ອມສຳນັກງານຂອງຂ້າຫລວງຝະລັ່ງ ແລະ ສານຢູ່ຕາມທາງຄົນຍ່າງລຽບທາງຫລວງ. ຕະຫລອດສາມມື້ສາມຄືນພວກເຂົາລໍຖ້າຄຳຕອບ ຕໍ່ການທວງໃຫ້ຫລຸດ ການເສຍສ່ວຍ ແລະ ໃຫ້ລົບລ້າງລະບອບເຮັດວຽກສັບພະທຸກ.

ນັກຮຽນຈຳນວນໜຶ່ງຂອງວິທະຍາໄລແຫ່ງຊາດ ໂດຍແມ່ນແທ່ງ ເປັນຫົວໜ້າກໍໄດ້ເຂົ້າຮ່ວມ ໃນການເດີນຂະບວນຄັ້ງນີ້. ແທ່ງໄດ້ເວົ້ານຳພວກເພື່ອນຮ່ວມຮຽນ ວ່າ "ເພື່ອນຮ່ວມຊາດຂອງພວກເຮົາຫວັງໃຫ້ພວກຝະລັ່ງຕ້ອງລົບລ້າງການເສຍສ່ວຍ. ພວກເຮົາຕ້ອງຊ່ວຍເຫລືອເຂົາເຈົ້າ ເພາະພວກເຮົາ ຮູ້ຈັກພາສາຝະລັ່ງ ".

ແທ່ງພ້ອມດ້ວຍໝູ່ຄູ່ໄດ້ໄປຫາປະຊາຊົນ ຈາກໝູ່ນີ້ໄປຫາໝູ່ອື່ນ, ອ່ານບົດກອນຮັກຊາດ ອັນມີເນື້ອໃນຮຽກຮ້ອງຢ່າງເດັດດ່ຽວໃຫ້ຕໍ່ສູ້ເອົາສິດຜົນປະໂຫຍດຂອງ ປະຊາຊົນນັ້ນໃຫ້ ພວກເດີນຂະບວນຟັງ. ປະຊາຊົນນະຄອນເວ້ໄດ້ນຳເອົາຊາ, ນ້ຳດື່ມ ມາບໍລິການຊາວນາ. ປະຊາຊົນພໍໃຈນຳບັນຍາກາດສາມັກຄີອ້າຍນ້ອງທີ່ປົກຄຸມຢູ່ໃນທົ່ວ ທຸກແຫ່ງຫົນ. ພວກເພິ່ນເອີ້ນກັນດ້ວຍສັບໃໝ່ທີ່ຫາກໍ່ເກີດຂຶ້ນວ່າ "ເພື່ອນຮ່ວມຊາດ". ສັບນັ້ນມັນດັງກ້ອງກັງວານຄືຈັງຫວະດົນຕີປະສານກົມກຽວກັນຢ່າງເລິກ ເຊິ່ງ ກັບບັນດາຜູ້ຮັກຊາດ.

ອຳນາດປົກຄອງເມືອງຂຶ້ນຝະລັ່ງມີຄວາມສະທ້ານຢ້ານກົວຕໍ່ຄື້ນເດີນຂະບວນຂອງມະຫາຊົນ. ພວກເຂົາພະຍາຍາມສວຍໃຊ້ອຳນາດຂອງເຈົ້າຊີວິດປຸຍເຕິນ ຊຶ່ງໃນເວລານັ້ນ ຫາກໍ່ມີອາຍຸໄດ້ ແປດປີ ເພື່ອຊຸກຊວນໃຫ້ພວກເດີນຂະບວນປະທ້ວງກັບຄືນເຮືອນ . ລາຊະລົດທີ່ເຄືອບຄຳ ແລະ ທາດ້ວຍນ້ຳກ້ຽງ ລາກດ້ວຍມ້າສີ່ໂຕແລ່ນອອກຈາກລາດຊະວັງ. ສອງຂ້າງລົດມີກອງທະຫານມາຊຸມກັນຢ່າງແໜ້ນໜາ. ແຕ່ເຈົ້າຊີວິດ ໜຸ່ມນ້ອຍຄົນນັ້ນບໍ່ສາມາດຈະເຮັດຟ້າເຮັດໄຟກັບໃຜໄດ້. ມັນເປັນຄວາມຈິງແທ້ ປະຊາຊົນຍະທາງໃຫ້ເຈົ້າຊີວິດຜ່ານໄປ, ສ່ວນໜ້ອຍປ້ອງກັນ ແລະ ຄົນອື່ນນັ້ນຖືກພວກເດີນຂະບວນ ປະທ້ວງຈັບ ແລະ ບັງຄັບໃຫ້ກັບຄືນ. ພວກຝະລັ່ງບໍ່ກ້າເດຫົວອອກນອກໄດ, ພວກເດີນຂະບວນປະທ້ວງເປັນເຈົ້າການໃນຕົວເມືອງ. ຮອດມື້ທີສາມ ກອງທະຫານເຄື່ອນທັບ ເຂົ້າມາໃນນະຄອນຫລວງຕາມຄຳສັ່ງຂອງຂ້າຫລວງ, ແລ້ວການປາບປາມກໍເລີ່ມຂຶ້ນ. ພວກທະຫານຝະລັ່ງຍິງປືນເຂົ້າໃສ່ຝູງຄົນທີ່ບໍ່ມີອາວຸດ. ການຕໍ່ສູ້ແບບຕົວຕໍ່ຕົວດຳເນີນໄປຢູ່ເທິງຂົວຈາງຕຽນ. ຊາກສົບຂອງຜູ້ຖືກຂ້າຕາຍຖືກໂຍນຂ້າມພະນັກຂົວຕົກລົງນ້ຳປານຜັກປານປາ. ຊາວນາສ່ຽງຊີວິດໂດດເຂົ້າໃສ່ພວກທະຫານສັດຕູ, ປ້ຳກັນຕົກລົງນ້ຳຕາຍ ພ້ອມກັນ.

ນັກຮຽນຂອງວິທະຍາໄລຈຳນວນຫລາຍ ໂດຍສະເພາະກໍແມ່ນຫົວໜ້າຂອງພວກເຂົາໄດ້ຮັບບາດເຈັບຈາກການຕໍ່ສູ້ດັ່ງກ່າວ. ແທ່ງໄດ້ຫລຸດລອດຈາກການຈັບກຸມແລະໄດ້

ປົບໜີໄປລີ້ຢູ່ເຮືອນຄົນລ້ຽງເຄີຍກັນກັບຄອບຄົວຂອງເພິ່ນ. ເຊົ້າວັນຕໍ່ມາ ແທ້ງກໍກັບມາເຂົ້າໂຮງຮຽນຕາມປົກກະຕິ.

ຖັດຈາກນັ້ນມາ ລົດມ້າຄັນໜຶ່ງ ທີ່ບັນທຸກນາຍທະຫານພ້ອມດ້ວຍພົນທະຫານ ຈຳນວນໜຶ່ງໄດ້ມາຍັງວິທະຍາໄລແຫ່ງຊາດ. ພວກທະຫານຍ່າງຕິດຕາມ ຊູເກ ຜູ້ອຳນວຍການຂອງວິທະຍາໄລເຂົ້າມາໃນຫ້ອງຮຽນຂອງແທ້ງ.

" ພວກເຈົ້ານາຍຢາກເຫັນນັກຮຽນຄົນໜຶ່ງ ເປັນຄົນສູງ, ຜິວພັນດຳແດງຂອງຫ້ອງນີ້ ! "

ນາຍທະຫານແຜດສຽງຂຶ້ນ, ທ່າທາງຂິງຂັງມຶງມໍ. (ແທ້ງເປັນຊາຍໜຸ່ມທີ່ມີຮູບຮ່າງສູງ, ມີຜິວພັນກ່ຳແດດຈົນເປັນເງົາ ຄືກັນກັບຄົນທີ່ອາໄສຢູ່ຊົນນະບົດອື່ນໆ).

" ຂ້ອຍໄດ້ຮັບຄຳສັ່ງໃຫ້ໄລ່ນັກຮຽນຜູ້ເປັນຕົວການກໍ່ການຈະລາຈົນນີ້ອອກຈາກວິທະຍາໄລໃນເວລານີ້ໂລດ", ມັນປະກາດໂປ້ງໆ.

ປີການສຶກສາຮ່ຳຮຽນຂອງແທ້ງຈຶ່ງຈົບລົງຄືແນວນີ້, ແລ້ວຊີວິດອອກແຮງງານເພື່ອກຸ້ມຕົນເອງກໍເລີ່ມຂຶ້ນ.

ສອງສາມມື້ ທີ່ພັກອາໄສຢູ່ນະຄອນຫລວງເວ້ທີ່ສັ່ນສະເທືອນ ໂດຍການປະທ້ວງຂອງປະຊາຊົນໄດ້ສົ່ງຜົນສະທ້ອນອັນແຂງແຮງໃສ່ຈິດໃຈຂອງແທ້ງ. ສຳລັບແທ້ງນັ້ນສອງສາມມື້ເຫລົ່ານັ້ນມີຄ່າເທົ່າກັບຫລາຍປີ ຊຶ່ງເພິ່ນດຳລົງຊີວິດແບບປະຖົມປະຖານ ສະໜ່ຳສະເໝີຢູ່ບ້ານດອກບົວ. ຖ້າວ່າໃນເມື່ອກ່ອນຄວາມລຳບາກຍາກເຂັນ ແລະ ແນວຄິດຈິດໃຈຂອງປະຊາຊົນປຽບເໝືອນສົ່ງນາມທຳທີ່ຫວ່າງເປົ່າສຳລັບແທ້ງແລ້ວ, ມາບັດນີ້ການດຳລົງຊີວິດຕົວຈິງໃນແຕ່ລະວັນ ໄດ້ສອນບົດຮຽນອັນຈິງຈັງ ແລະ ມີຜົນປະໂຫຍດໃຫ້ແກ່ເພິ່ນຕື່ມຂຶ້ນອີກໄຊ້. ແທ້ງຫວນຄິດດ້ວຍຄວາມເຈັບປວດທໍລະມານໃຈເຖິງ ບັນດາຂະບວນການຮັກຊາດຕ່າງໆທີ່ປະກົດຕົວຂຶ້ນເຊັ່ນຂະບວນການ "ເກີນເວືອງ", ຂະບວນ "ດົງຢູ", ຂະບວນການ "ຢຸຍເຕີນ", ແລະ ຂະບວນການອື່ນໆ... ແຕ່ບັນດາຂະບວນການເຫລົ່ານີ້ລ້ວນແຕ່ຖືກຈົມຢູ່ໃນທະເລເລືອດ ແລະ ແຕ່ລະຄັ້ງ ທີ່ຂະບວນການຮັກຊາດໜຶ່ງປະລາໄຊ, ພວກລ່າເມືອງຂຶ້ນແຮ່ງມັດຄາໃສ່ຄໍປະຊາຊົນແໜ້ນຕື່ມອີກໄຊ້.

ເມື່ອແທ້ງອອກຈາກເວ້ແລ້ວ ເພິ່ນກໍໄປຍື່ນຄຳຮ້ອງເສັງເປັນຄູສອນຢູ່ ໂຮງຮຽນແຫ່ງໜຶ່ງຢູ່ບ້ານກຸຍເຢີນ. ໃນການສອບເສັງຄັ້ງນັ້ນ ແທ້ງໄດ້ຮັບຄະແນນຍອດຢ້ຽມ. ແຕ່ວ່າເມື່ອລາຍຊື່ຖືກສະເໜີຜ່ານ ຟຣີເຢ ເຈົ້າໜ້າທີ່ຝະລັ່ງ ຄົນນີ້ຂາຊື່ຂອງ ແທ້ງອອກ

ຍ້ອນວ່າ ແຫ່ງ ຢູ່ໃນການຕິດຕາມຂອງເຈົ້າໜ້າທີ່ຕຳຫລວດ.

ໃນປີ ໑໙໑໐ ແຫ່ງໄດ້ໄປຢູ່ໃນເມືອງຟານຖຽດ. ຫລາຍຄົນໄດ້ເລົ່າວ່າ ຢູ່ຟານຖຽດມີໂຮງຮຽນເອກະຊົນແຫ່ງໜຶ່ງຈັດຢູ່ປະເພດກ້າວໜ້າທີ່ສຸດ ໃນຫວຽດນາມສະໄໝນັ້ນ. ໂຮງຮຽນຫລັງນີ້ ແມ່ນບໍລິສັດຜະລິດນ້ຳປາ ແລະ ຂາຍສິນຄ້າຕ່າງໆ ເປັນເຈົ້າຂອງ. ທັງບໍລິສັດ ແລະ ໂຮງຮຽນກໍເກີດຂຶ້ນຕາມຂໍ້ລິເລີ່ມຂອງບັນດາປັນຍາຊົນ ກ້າວໜ້າ ໃນຕອນເລີ່ມຕົ້ນເກີດມີຂະບວນການເພື່ອປ່ຽນແປງນັ້ນເອງ. ໃນເວລານັ້ນ ແຫ່ງອາຍຸໄດ້ ໔໐ ປີ ກາຍເປັນຄູສອນຊັ້ນ ປ.໔, ປ.໓ ຂອງໂຮງຮຽນແຫ່ງນີ້.

ອ້າຍຄູໜຸ່ມ ບໍ່ພຽງແຕ່ມີຄວາມປາຖະໜາຢາກຈະສິດສອນ ໃຫ້ຮູ້ ອ່ານອອກຂຽນໄດ້ເທົ່ານັ້ນ ແຕ່ຫາກຍັງຖ່າຍທອດນ້ຳໃຈຮັກຊາດ ຈິດໃຈຮັກອິດສະຫລະພາບໃຫ້ນັກຮຽນອີກ. ເພິ່ນຍັງໄດ້ເລົ່າສູ່ນັກຮຽນຟັງເຖິງແນວຄິດມະນຸດສະທຳ, ສະເໝີພາບ ແລະ ພາລະດອນພາບ ທີ່ອ້າຍຄູຈຳໄດ້ໃນບັນດາປຶ້ມຂອງຄົນຝະລັ່ງ ຜູ້ນຳເອົາແສງສະຫວ່າງມາໃຫ້. ເພິ່ນນຳເອົາແນວຄິດກ້າວໜ້າແຫ່ງມະຫາປະຕິວັດຝະລັ່ງມາສູ່ປັນກັບ ແນວຄິດຮັກສາເດີມ ແນວຄິດງົມງວາຍ ແລະ ຫລ້າຫລັງ ຂອງແນວຄິດສັກດີນາ ທີ່ກົດໜ່ວງການຂະຫຍາຍຕົວຂອງຊີວິດການເມືອງ ແລະ ສັງຄົມຢູ່ປະເທດຫວຽດນາມເມືອງຂຶ້ນ.

ໃນຈຳນວນຄູສອນຂອງໂຮງຮຽນ, ແຫ່ງກໍ່ແມ່ນຄົນໜຶ່ງທີ່ກ້າວໜ້າກວ່າໝູ່ ທຸກຄົນ. ໕ ໂມງເຊົ້າຂອງທຸກໆມື້ ອ້າຍຄູແຫ່ງໄດ້ນຳພານັກຮຽນອອກມາຫັດກາຍຍະ ບໍລິຫານຢູ່ເດີ່ນໂຮງຮຽນ ແລະ ທຸກໆວັນພະຫັດຂອງອາທິດ ອ້າຍຄູ ພ້ອມນັກຮຽນພາກັນຫັດແລ່ນ ໃນເວລານັ້ນ, ການສອນຫລິ້ນກິລາໃນໂຮງຮຽນຖືວ່າເປັນການປະຕິວັດ ອັນແທ້ຈິງ.

ແຕ່ອ້າຍຄູແຫ່ງສອນຢູ່ໃນໂຮງຮຽນນີ້ໄດ້ບໍ່ດົນປານໃດ. ຄວາມກະຫາຍໃນຄວາມຮູ້ຮຽນຮ້ອງໃຫ້ແຫ່ງຕ້ອງອອກເດີນທາງ. ໃນທ້າຍປີ ໑໙໑໐ ແຫ່ງເຂົ້າໄປຢູ່ ໄຊງ່ອນ ແລະເຂົ້າຮຽນຢູ່ໂຮງຮຽນທີ່ຫາກໍ່ເປີດໃໝ່, ເປັນໂຮງຮຽນທີ່ສ້າງລູກເຮືອຂົນສົ່ງສິນຄ້າ ແລະ ກຳມະກອນຜູ້ມີລະດັບສຳລັບອູ່ເຮືອຂອງໄຊງ່ອນໂດຍສະເພາະ.

ສຳລັບຄົນອື່ນແລ້ວ ການເລືອກເອົາອາຊີບດັ່ງກ່າວຂອງແຫ່ງ ຜູ້ຖືກຳເນີດມາຈາກຄອບຄົວປັນຍາຊົນ ແລະ ມີລະດັບການສຶກສາ ອາດຈະເວົ້າໄດ້ວ່າເປັນເລື່ອງແປກປະຫລາດ ແຕ່ວ່າບາດກ້າວເດີນອັນບໍ່ມີໃຜຄິດມາກ່ອນ ອັນນີ້ ແມ່ນໝາກຜົນທີ່ມີ ຕັກກະສາດແຫ່ງການຂະຫຍາຍຕົວຂອງໂລກແຫ່ງຈິດໃຈຂອງຊາວໜຸ່ມຮັກຊາດຜູ້ທີ່ໄດ້ຕັ້ງ ເປົ້າ

ໝາຍກັບຕົນເອງວ່າ ຈະຊອກເອົາ "ດາບວິເສດ" ເພື່ອກູ້ເອົາປະຊາຊົນ ກູ້ເອົາ ປະເທດຊາດ.

ຖ້າວ່າຊາວໜຸ່ມອາຍຸຮຸ່ນດຽວກັບແຫ່ງຈຳນວນໜຶ່ງຖືກຟານໂບ່ຍເຈົາຊັກຈູງ ໄປທິດຕາເວັນອອກ ໄປສູ່ປະເທດຍີ່ປຸ່ນ ໂດຍຖືເອົາປະເທດຍີ່ປຸ່ນເປັນແມ່ແບບຂອງປະເທດຫວຽດນາມທີ່ມີເອກະລາດໃນອະນາຄົດ, ສ່ວນແຫ່ງຊາ້ພັດມຸ່ງໜ້າໄປສູ່ໂລກໜຶ່ງ ຕ່າງຫາກ. ບາງທີອາດເປັນຍອມວ່າໄດ້ຮູ້ຈັກປະຫວັດສາດປະເທດຝະລັ່ງ, ຮູ້ຈັກແນວຄິດຂອງມະຫາບຸລຸດຝະລັ່ງ ຜູ້ນຳເອົາແສງສະຫວ່າງມາໃຫ້ ຫລືຍິ່ງກວ່ານັ້ນ ກໍຍ່ອມສະຕິປັນຍາທີ່ມີມາແຕ່ເກີດ ເຊິ່ງແມ່ນຄຸນລັກສະນະຂອງອັດສະລິຍະບຸກຄົນນັ້ນເອງ, ແຫ່ງຈຶ່ງເກີດມີຄວາມຄິດອັນເທື່ອລະກ້າວວ່າ ມີແຕ່ຢູ່ເອີລົບແຫ່ງດຽວເທົ່ານັ້ນ ຈຶ່ງເປັນບ່ອນ ທີ່ການປະຕິວັດລະເບີດອັນເລື້ອຍໆ ນັບທັງມະຫາປະຕິວັດຝະລັ່ງປີ ໑໗໘໙ ແລະ ກອມມູນປາຣີ, ເປັນບ່ອນທີ່ຄວາມເວົ້າອັນໜ້າຕື່ນຕັນໃຈກ່ຽວກັບ "ອິດສະຫລະພາບ", " ສະເໝີພາບ", " ພະລາດອນພາບ" ຂອງຄົນທັງໝົດ ດັ່ງກ້ອງກັງວານເປັນເທື່ອທຳອິດ, ທັງເປັນບ່ອນທີ່ມີວິທະຍາສາດ-ເຕັກນິກຂະຫຍາຍຕົວຢ່າງວ່ອງໄວກວ່າ ຖ້າສົມທຽບ ໃສ່ທະວີບອື່ນ ມີແຕ່ຢູ່ພູ້ນເທົ່ານັ້ນ ຈຶ່ງອາດເກັບກຳເອົາຄວາມຮູ້ອັນຈຳເປັນ ແລະອາດຊອກເຫັນເສັ້ນທາງປົດປ່ອຍປະເທດຊາດໄດ້.

ເປັນອັນແນ່ນອນແລ້ວວ່າ ຄວາມນຶກຄິດດັ່ງກ່າວເກີດມີຢູ່ກັບແຫ່ງເປັນເທື່ອທຳອິດໃນເມື່ອເພິ່ນອ່ານບົດປະພັນຂອງ ຊັງສັກ ຣຸດໂຊ. ຈາກບົດປະພັນຊື່ "ຄຳສາລະພາບ" ຂອງ ຣຸດໂຊ ແຫ່ງຮູ້ໄດ້ວ່າ ຣຸດໂຊ ຜູ້ໜຸ່ມນ້ອຍ ກ່ອນຈະກາຍມາເປັນມະຫາບຸລຸດຜູ້ນຳເອົາແສງສະຫວ່າງມາໃຫ້ນັ້ນກໍຕ້ອງໃຊ້ເວລາຮອດສິບປີໂດຍທັດສະນະຈອນໄປຕາມເສັ້ນທາງຕ່າງໆຂອງບັນດາປະເທດເອີລົບ. ດັ່ງນັ້ນເພິ່ນຈຶ່ງໄດ້ຮຽນວິຊາອັນສຳຄັນ ແລະແສນຍາກ ນັ້ນຄືວິຊາຄວາມຮູ້ກ່ຽວກັບຊີວິດ. ຕັ້ງແມ່ນກະໂຕຊີວິດນັ້ນເອງ ກໍຄືກັນ ກັບໂລກທີ່ບໍ່ມີຄວາມສະເໝີພາບ, ໂລກແຫ່ງຄວາມລຳບາກຍາກແຄ້ນ, ຄວາມເດືອດຮ້ອນຂອງປະຊາຊົນນັ້ນເອງທີ່ໄດ້ຊ່ວຍໃຫ້ຣຸດໂຊກາຍເປັນຜູ້ເຜີຍແຜ່ແນວຄິດອັນມີຄ່າ ສູງສົ່ງກ່ຽວກັບອິດສະຫລະພາບ ສະເໝີພາບ ພະລາດອນພາບ, ຈົນກາຍເປັນຜູ້ປ່າວປະກາດຂອງມະຫາປະຕິວັດຝະລັ່ງ.

ໃນປີ ໑໗໘໓, ໃນການໃຫ້ສຳພາດແກ່ນັກສື່ຂ່າວຂອງວາລະສານ "ໝັດໄຟ " ຂອງໂຊວຽດ ສະຫາຍ ໂຮ່ຈີມິນ ໄດ້ອະທິບາຍກ່ຽວກັບການຕັດສິນໃຈທ່ອງທ່ຽວໄປສູ່ແດນ

ໄກດັ່ງຕໍ່ໄປນີ້:" ເມື່ອອາຍຸຍ່ອງເຂົ້າປະມານ ໑໙ ປີ, ເປັນເທື່ອທຳອິດທີ່ຂ້ອຍໄດ້ຟັງສັບພາສາຝະລັ່ງ ອິດສະຫລະພາບ ສະເຫມີພາບ ພະລາດອນພາບ. ສຳລັບພວກຂ້ອຍແລ້ວ ໃນເວລານັ້ນ ຄົນຫນັງຂາວທຸກໆຄົນລ້ວນແຕ່ຖືວ່າເປັນຄົນຝະລັ່ງ ສະນັ້ນຂ້ອຍຈຶ່ງຢາກ ຮຽນເຂົ້າໃຈຄວາມສືອໄລຂອງຝະລັ່ງ, ຊອກຮູ້ເບິ່ງວ່າມີຫຍັງແດ່ລີ້ຊ່ອນຢູ່ເບື້ອງຫລັງຂອງບັນດາສັບເຫລົ່ານັ້ນ".

ຢູ່ໄຊງ່ອນ ຄົນເຮົາຮູ້ສຶກວ່າທະວີບເອີລົບບໍ່ຢູ່ໄກປານໃດ. ຢູ່ທົ່ວທຸກແຫ່ງຂອງນະຄອນທ່າເຮືອອັນໃຫຍ່ໂຕມະໂຫຖານແຫ່ງນີ້ ຈະເຫັນແຕ່ປ້າຍໂຄສະນາຂອງບໍລິສັດ "ຊາກເຊ ເຣອຊຸຍນີ" ຂອງຝະລັ່ງ. ຢູ່ເທິງປ້າຍໂຄສະນາມີຮູບແຕ້ມກຳປັ່ນກຳລັງແຫກຄື້ນ ທະເລມຸ່ງຫນ້າໄປຍັງຕົວເມືອງຫ່າງໄກ ອັນມີແຮງດູດດຶງເຊັ່ນ ສິງກະໂປ, ໂກລົມໂບ, ຈີບູຕີ, ປໍຊາອິດ, ມາກໄຊ, ບັອກໂດ. ຕາມປົກກະຕິ ຢູ່ຕາມບັນດາທ່າເຮືອຫວຽດນາມ ເຈົ້າຫນ້າທີ່ຂອງບໍລິສັດ "ຊາກເຊ ເຣອຊຸຍນີ" ໄດ້ຈ້າງຄົນອົ້ນຕ່ຳຮັບໃຊ້ຢູ່ໃນກຳປັ່ນໂດຍສານ.

ວັນຫນຶ່ງແທ່ງເລົ່າສູ່ເພື່ອນສະຫນິດຂອງເພິນຄົນຫນຶ່ງທີ່ເຄີຍຮຽນຮ່ວມກັນ ສາມເດືອນຢູ່ທີ່ໂຮງຮຽນອະຊີວະຟັງ ກ່ຽວກັບການຕັດສິນໃຈຂອງຕົນວ່າ

" ເລ່ເອີຍ ! ເຮົາໄດ້ຕັດສິນໃຈຈະໄປຕ່າງປະເທດ, ເຮົາຢາກໄປປະເທດຝະລັ່ງແລະປະເທດຕ່າງໆອີກ. ເຮົາຈະສັງເກດເບິ່ງວ່າເຂົາໄດ້ດຳລົງຊີວິດ ແລະ ອອກແຮງງານກັນຄືແນວໃດ, ຕໍ່ຈາກນັ້ນ ເຮົາຈຶ່ງຈະກັບຄືນປະເທດ ເພື່ອຊ່ວຍເຫລືອປະຊາຊົນເຮົາ ".

"ໂອຍເພື່ອນເອີຍ! ໂຕຈະເອົາເງິນຄຳມາແຕ່ໃສໃຊ້ຈ່າຍໃນການເດີນທາງ ?" ຜູ້ເປັນເພື່ອນຖາມຂຶ້ນດ້ວຍຄວາມປະຫລາດໃຈ.

ແທ່ງຊູແຂນທັງສອງເບື້ອງຂຶ້ນ ແລະ ຕອບດ້ວຍຄວາມຫນັກແຫນ້ນວ່າ :

"ນີ້ເດ ເງິນ ! ເຮົາຈະອອກແຮງງານ ຈະເຮັດວຽກທຸກຢ່າງລ້ຽງກຸ້ມຕົນເອງ ແລະ ຈະມີເງິນສຳລັບຄ່າເດີນທາງ ".

ຕອນທ່ຽງຂອງວັນທີ ໕ ເດືອນມິຖຸນາ ປີ ໑໙໑໑ ແທ່ງປະກົດຕົວອີກເທື່ອຫນຶ່ງຢູ່ທ່າເຮືອທີ່ໃສ່ຊື່ເປັນສຳນວນກະວີວ່າ ທ່າເຮືອ "ຍ່າຣົ່ງ ". ຢູ່ທ່າເຮືອ ເພິນແນມເຫັນ

ກຳປັ່ນໂດຍສານລຳໜຶ່ງໃຫຍ່ທີ່ສຸດ. ຢູ່ເບື້ອງຂ້າງຂອງກຳປັ່ນມີປ້າຍຊື່ "ຈອມພົນເຮືອລາຕູດ ເຕຣວິນ". ກຳປັ່ນກຳລັງຮັບເອົາຜູ້ໂດຍສານ ແລະ ສິນຄ້າ. ເມື່ອກາວ ບາດຕີນຢຽບຂຶ້ນກ່າຍເຂົ້າກຳປັ່ນ ຫລັງຈາກຕັ້ງສະຕິຄືນໄດ້ອຶດໃຈດຽວ ເພິ່ນລອງຖາມ ເບິງວ່າ ມີວຽກຫຍັງພໍໃຫ້ເຮັດແດ່. ຫລາຍຄົນທີ່ໄດ້ຍິນກໍຫົວແຊວງຂຶ້ນພອມກັນ, ເພາະວ່າຊາວໜຸ່ມມີຮູບຮ່າງອັນບອບບາງ ຊຶ່ງເປັນນັກຮຽນຫລາຍກວ່າ ບໍ່ຄືຊາວກຳມະກອນ ທີ່ຕ້ອງເຮັດວຽກໜັກຈັກດີ. ແຕ່ເພິ່ນກໍຍັງຢືນຢູ່ບ່ອນຖາມນັ້ນ, ດ້ວຍທ່າທາງ ອ້ອນວອນຢ່າງໃຈຈິງ ຈຶ່ງເຮັດໃຫ້ກຳມະກອນຫວຽດນາມຄົນໜຶ່ງເຂົ້າໃຈເພິ່ນ ພາເຂົ້າພົບກັບຕັນເຮືອ. ກັບຕັນເຮືອແນມເບິ່ງເພິ່ນດ້ວຍຄວາມສົງໄສ ແລະເຄັ່ງຂຶມ ຍ້ອນມອງເຫັນທ່າທີເດັດດ່ຽວຂອງຊາຍໜຸ່ມແປກໜ້າທີ່ມາຂໍເຮັດວຽກນີ້ເລີຍເຮັດໃຫ້ກັບຕັນເຮືອເກີດຄວາມພໍໃຈ.

" ເອີໄດ້ແລ້ວ,ເຈົ້າຈະໄດ້ເປັນຜູ້ຊ່ວຍອ້າຍລ້ຽງ. ແຕ່ເຊົ້າມື້ອື່ນເປັນຕົ້ນໄປໃຫ້ມາເຮັດວຽກຢູ່ນີ້. ເຈົ້າຊື່ຫຍັງ ? "

" ຂ້ອຍຊື່ວ່າ ວັນບາ. ຊາຍໜຸ່ມຄິດອອກໄດ້ຈຶ່ງຕອບທັນໃດໂລດ. ເຖິງແມ່ນວ່າຊື່ຫາກໍຕັ້ງຂຶ້ນໃໝ່ໆ ແຕ່ມັນຖືກກັບຕົວຈິງ ເພິ່ນເປັນລູກຜູ້ທີ່ສາມໃນຄອບຄົວ.

ຄົນຮັກຊາດ

໑

ຕັ້ງແຕ່ຢູ່ເທິງກຳປັ່ນ ແທ່ງປະກົດເຫັນເຫດການສຳຄັນ. ໃນຈຳນວນຜູ້ໂດຍສານ ແທ່ງເອົາໃຈໃສ່ນຳທະຫານຝະລັ່ງສອງຄົນທີ່ມີອາຍຸປະມານສ່ຳດຽວກັນກັບຕົນ, ເຂົາເຈົ້າຖືກປົດປ່ອຍອອກຈາກທະຫານ ແລະ ຖືກສົ່ງຄືນປະເທດຝະລັ່ງ. ເມື່ອມີໂອກາດ ດີຢ່າງນີ້, ແທ່ງສ້າງຄວາມສະໜິດສະໜົມກັບພວກເຂົາເທື່ອລະນ້ອຍ. ບາງຄັ້ງຄາວ ພວກເຂົາກໍໄດ້ເຮັດວຽກຊ່ວຍແທ່ງ ຍາມກາງຄືນ ພວກເຂົາໄດ້ສອນໃຫ້ແທ່ງເຂົ້າໃຈພາສາຝະລັ່ງຢ່າງລະອຽດ. ບາງເທື່ອເຂົາເຈົ້າກໍເອົາປຶ້ມທີ່ໜ້າສົນໃຈໃຫ້ແທ່ງໄວ້ອ່ານໃນຍາມຫວ່າງ. ສ່ວນແທ່ງເອງ ໄດ້ສອນພາສາຫວຽດໃຫ້ພວກເຂົາ ແລະ ລັກນອບຈອກກາເຟໃຫ້ເຂົາເຈົ້າ. ເມື່ອກ່ອນນີ້ ແທ່ງເຄີຍເຫັນແຕ່ຄົນຝະລັ່ງທີ່ຢູ່ໃນຖານະເປັນ ອາດຍາ ຜູ້ອວດອົ່ງຈອງຫອງ ແລະ ເປັນເຈົ້າໜ້າທີ່ຕຳຫລວດທີ່ຂົ່ມເຫັງໜີບຕົງປະຊາຊົນ ພວກເຂົາປະພຶດຕົນຄື ເປັນເຈົ້າຂອງດິນແດນຫວຽດນາມ ແລະ ຖືຄົນຫວຽດນາມ ເປັນ

ເຊື້ອຊາດຊັ້ນຕ່ຳ. ມາບັດນີ້ຢູ່ເທິງເຮືອນີ້ ແທ່ງປະຫລາດໃຈ ເມື່ອເຫັນວ່າໃນຈຳນວນຄົນຝະລັ່ງນີ້ກໍຍັງມີຄົນດີຄືກັນ.

ການຄົ້ນພົບອັນໜຶ່ງອີກແມ່ນຢູ່ທີ່ ມາກໄຊ ບ່ອນທີ່ຊ່ວຍໃຫ້ແທ່ງເລີ່ມຮູ້ຈັກປະເທດຝະລັ່ງ. ຢູ່ຕໍ່ໜ້າເຂົານັ້ນ ປະກົດເຫັນເຮືອນປະຊາຊົນຜູ້ທຸກຍາກທີ່ເກົ່າແກ່ປ່ເພ, ຂີ້ເຮື້ອຮ້າຍ, ເປິເປື້ອນດ້ວຍຄວັນດຳຕັ້ງຢູ່ແຄມທ່າເຮືອຢັ່ງຢາຍໄປຕາມແລວຍາວ ຂອງຮ່ອມແຄບໆຢູ່ຕາມເມືອງມາກໄຊ. ເວລາເດີນຫລິ້ນຢູ່ຕາມຖະໜົນ ແທ່ງ ໄດ້ພົບເຫັນຄົນຝະລັ່ງຈຳນວນໜຶ່ງນຸ່ງໂສ້ງເສື້ອຂາດສ້ອຍເປິເປື້ອນດ້ວຍຕາຕົນເອງ. ເພິ່ນສະເທືອນຈິດໃຈຫລາຍເມື່ອໄດ້ເຫັນສະພາບຂອງບັນດານາງສາວທີ່ຈຳເປັນຕ້ອງໄດ້ ຂາຍເນື້ອຂາຍຕົວຢູ່ຕາມຮ້ານເຫລົ້າ ເພື່ອເອົາຊີວິດລອດ. ຕອນເດິກ ເມື່ອກຳປັ່ນດຶງສະໝໍອໍ້ນ ເຮືອເລີ່ມອອກຈາກທ່າເຮືອມາກໄຊມຸ່ງໜ້າສູ່ ເລີຮາວ, ແທ່ງເວົ້າກັບໝູ່ທີ່ເປັນຜູ້ຊ່ວຍອ້າຍລ້ຽງ ທັງນອນຮ່ວມຫ້ອງດຽວ ດ້ວຍຄວາມແປກໃຈ ແລະ ສະຫລົດໃຈວ່າ :

"ຄວາມຈິງ ຢູ່ປະເທດຝະລັ່ງ ກໍຍັງມີຄົນທຸກຍາກຂາດເຂີນຄືກັນກັບຢູ່ ປະເທດເຮົາເນາະ. ແຕ່ເປັນຫຍັງຄົນຝະລັ່ງຈຶ່ງບໍ່ລ້ຽງດູໃຫ້ພຽງພໍ ແລະ ຂະຫຍາຍ ວັດທະນະທຳໃຫ້ປະຊາຊົນຂອງຕົນກ່ອນຊິໄປ "ສອນ" ພວກເຮົາ ?"

ໃນໄລຍະສອງສາມເດືອນ ແທ່ງໄດ້ເດີນທາງທາງທະເລໃນໄລຍະໄກສອງເທື່ອຊຶ່ງຄ້າຍຄືວ່າໄດ້ເດີນທາງເກືອບອ້ອມໂລກ. ເພິ່ນໄດ້ເດີນຜ່ານມະຫາສະໝຸດອັດລັງຕິກ ມະຫາສະໝຸດອິນເດຍ ທະເລອາຣັບ ທະເລແດງ ທະເລເມດິແຕຣາເນແລະສອງທະວີບໃໝ່ ຄືທະວີບອາຟະລິກາ ແລະທະວີບອາເມລິກາ. ເມື່ອມາຮອດນິວຢອກ, ແທ່ງ ຈຳເປັນຕ້ອງໄດ້ຮັບຈ້າງເຮັດວຽກສອງສາມເດືອນຢູ່ ບຣຸກລິນ. ໃນຄວາມຮູ້ສຶກຫລາຍຢ່າງທີ່ກະທົບຈິດໃຈຂອງແທ່ງ ເມື່ອເວລາມາຮອດປະເທດໃໝ່ນີ້ ແມ່ນຄວາມຮູ້ສຶກໃນນີ້ ທີ່ເພິ່ນໄດ້ຮູ້ຈັກກັບຄຳປະກາດເອກະລາດຂອງສະຫະລັດອາເມລິກາ ທີ່ປະຮອຍລະລຶກ ອັນເລິກເຊິ່ງທີ່ສຸດໄວ້ຢູ່ໃນຈິດໃຈຂອງແທ່ງ. ເພິ່ນເກີດຄວາມປະທັບໃຈໃນຄຳເວົ້າດັ່ງຕໍ່ໄປນີ້ "ທຸກຄົນເກີດມາລ້ວນແຕ່ສະເໝີພາບກັນ, ມີສິດຊຶ່ງບໍ່ມີໃຜສາມາດຢຽບຍ່ຳໄດ້. ໃນບັນດາສິດເຫລົ່ານັ້ນ ມີສິດດຳລົງຊີວິດ ສິດອິດສະຫລະພາບ ແລະ ສິດສະແຫວງຫາຄວາມຜາສຸກ ". ຄວາມເວົ້າເຫລົ່ານີ້ ເຮັດໃຫ້ແທ່ງສະເທືອນຈິດໃຈ ແລະ ກໍຈົດຈຳໄວ້ບໍ່ລືມ. ໃນຫລາຍປີຕໍ່ມາເພິ່ນໄດ້ທວນຄິດເຖິງຄຳເວົ້າເຫລົ່ານັ້ນ ເມື່ອລີ້ຊ່ອນເຮັດວຽກຢູ່ໃນຫ້ອງໜຶ່ງທີ່ຮ່າໂນ້ຍໃນຕອນກາງຄືນເພື່ອແຕ່ງຮ່າງປະກາດເອກະລາດຂອງປະເທດ

ຫວຽດນາມ.

ເຖິງຢ່າງໃດກໍດີ ຮູບພາບເຣິ້ຣາຍຂອງຄວາມເປັນຈິງໃນປະເທດອາເມລິກາ ທີ່ປະກົດຢູ່ຕໍ່ຫນ້າເພິ່ນນັ້ນ ໄດ້ລົບລ້າງຄວາມຄິດແບບເຟີ້ຝັນຂອງແທ່ງຢ່າງໄວວາ. ຢູ່ເບື້ອງຫລັງຄວາມເວົ້າອັນຈົບງາມກ່ຽວກັບອິດສະຫລະພາບ ແລະ ສະເຫມີພາບເຫລົ່ານັ້ນ ຊ້ຳພັດມີຄວາມບໍ່ຍຸດຕິທຳ ແລະ ຄວາມທຸກຍາກອຶດຫິວຂອງຊາວຜູ້ອອກແຮງງານ ນັບເປັນລ້ານໆຄົນ. ບັນດາເຮືອນໄຂດຳລົງຊີວິດແບບອັດຕະຄັດອັດສົນຢູ່ຕາມຊຸ້ມຮາເລມທີ່ຄົນຜິວດຳອາໄສຢູ່ ແລະ ເປັນບ່ອນທີ່ແທ່ງມັກເຂົ້າໄປຫາ, ປະກົດການແຫ່ງການຈຳແນກເຊື້ອຊາດຜິວພັນເກີດມີເປັນປະຈຳຢູ່ທຸກຫົນທຸກແຫ່ງ ເຮັດໃຫ້ແທ່ງສະເທືອນຈິດໃຈ ຢ່າງເລິກເຊິ່ງ.

ເຄິ່ງປີຜ່ານໄປ ແລະ ແທ່ງກໍອອກເດີນທາງຕໍ່. ຈຸດຫມາຍ ຂອງການເດີນທາງໃນຂັ້ນຕໍ່ໄປແມ່ນປະເທດອັງກິດ. ແທ່ງມາຮອດປະເທດອັງກິດຢູ່ໃນຊ່ວງເວລາທີ່ສຽງປືນໃຫຍ່ຂອງມະຫາສົງຄາມໂລກຄັ້ງທີຫນຶ່ງກຳລັງດັງກ້ອງທົ່ວທະວີບເອີລົບ. ອັງກິດ ປົກຄຸມໄປດ້ວຍນ້ຳຫມອກຫນາ, ມັນຕ້ອນຮັບແທ່ງຢ່າງຈືດຈາງ. ໃນມື້ຝົນຕົກຫນັກ ໂດຍນຸ່ງໂສ້ງເສື້ອບາງໆ ແທ່ງໄດ້ເຮັດວຽກເປັນຄົນປັດກວາດຫິມະອອກຈາກທາງສາຍຕ່າງໆ. ໃນນະຄອນລອນດອນ, ທັງເປັນຊ່າງດັງໄຟໃຫ້ພວກເສດຖີແລກກັບຄ່າແຮງງານເລັກໆ ນ້ອຍໆ ແຕ່ແທ່ງ ກໍຊອກວິທີແບ່ງເງິນສ່ວນຫນຶ່ງເປັນຄ່າຮຽນພາສາອັງກິດ. ຈາກນັ້ນ ສອງສາມເດືອນ ແທ່ງກໍໂຊກດີ, ເພິ່ນຖືກຮັບເຂົ້າເປັນຜູ້ຊ່ວຍອ້າຍລ້ຽງຂອງໂຮງແຮມມີຊື່ ສຽງແຫ່ງຫນຶ່ງ ຄື ໂຮງແຮມ "ຄານຕັນ" ຕັ້ງຢູ່ແຄມຖະຫນົນໄຮມາແກັດ. ພໍ່ຄົວຜູ້ມີຊື່ສຽງຄື ແອສໂກຟີເອ ກໍໄດ້ເຮັດວຽກຢູ່ໂຮງແຮມຫລັງນີ້, ສະໄຫມນັ້ນເພິ່ນມີຊື່ສຽງອັນໂດ່ງດັງຢູ່ທີ່ບັນດາໂຮງແຮມຂອງທະວີບເອີລົບ.

ແຕ່ລະມື້ລະວັນເຕັມໄປດ້ວຍວຽກງານອັນຫນັກຫນ່ວງຈົນວ່າອ່ອນເພຍ. ນັບແຕ່ມື້ຈາກປະເທດຊາດມາ ແທ່ງມີຊີວິດຫມົກຫມຸ້ນຢູ່ໃນເຮືອນໄຂອັນລຳບາກຍາກແຄ້ນ ດ້ວຍການເຮັດວຽກຫນັກ ຈົນເຖິງຂັ້ນວ່າ ຖ້າຫາກເປັນຜູ້ທີ່ມີສຸຂະພາບບໍ່ແຂງແຮງ ແນ່ນອນວ່າອາດຈະກິ້ງຕົກລົງເຫລວເລິກແຫ່ງຊີວິດຢ່າງງ່າຍດາຍ. ນ້ຳໃຈເດັດດ່ຽວ ແລະສູ້ຊົນມານະຈິດ ແລະ ຫລັກສິນທຳອັນເຂັ້ມງວດ ທີ່ພໍ່ຂອງແທ່ງໄດ້ສິດສອນໃຫ້ ແຕ່ຄາວ ເຍົາໄວນຸ້ມ ສິ່ງເຫລົ່ານີ້ໄດ້ຊ່ວຍໃຫ້ແທ່ງຜ່ານຜ່າບັນດາຂໍ້ຫຍຸ້ງຍາກຕ່າງໆມາໄດ້. ຫລາຍຄົນທີ່ໄດ້ໃກ້ຊິດຕິດແທດກັບແທ່ງໃນຫລາຍປີເຫລົ່ານັ້ນ ລ້ວນແຕ່ຈື່ໄດ້ວ່າ ບໍ່ເຄີຍໄດ້ຍິນ ແທ່ງ

ຈະເວົ້າຄຳຫຍາບຈັກເທື່ອ ເພິ່ນບໍ່ເຄີຍດື່ມເຫຼົ້າເມົາຢາ ແລະ ບໍ່ຫຼິ້ນການພະນັນ ຈັກເທື່ອ ແຕ່ຊ້ຳພັດໃຊ້ເວລາຫວ່າງ ເພື່ອສຶກສາຮ່ຳຮຽນ ແລະ ອ່ານປຶ້ມ, ເຖິງແມ່ນວ່າຈະພົບກັບສະພາບຫຍຸ້ງຍາກພຽງໃດກໍຕາມ.

ເຖິງແມ່ນວ່າເຮັດວຽກຢູ່ນຳແອສໂກຟີເອ ບໍ່ລຳບາກປານໃດກໍຕາມ ແຕ່ວ່າແຫ້ງຜູ້ບໍ່ມັກຢູ່ບ່ອນເກົ່າກໍບໍ່ຍອມອົດທົນດຳລົງຊີວິດຢ່າງຫງວມເຫງົາ ແລະຊ້ຳຊາກຢູ່ລອນດອນອັນເປັນສະຖານທີ່ຫ່າງໄກຈາກທຸກສິ່ງທຸກຢ່າງ ຊຶ່ງສາມາດເຊື່ອມໂຍງ ແຫ້ງກັບປະເທດຊາດ. ຜ່ານຈາກການອ່ານໜັງສືພິມ ແຫ້ງຈຶ່ງຮູ້ຂ່າວວ່າ ຢູ່ອີກພາກໜຶ່ງຂອງຊອງແຄບລາ-ມັງ ພູມດີຢູ່ຝະລັ່ງ ມີເພື່ອນຮ່ວມຊາດຂອງເພິ່ນຈຳນວນໜຶ່ງມາເຮັດວຽກ ແລະດຳລົງຊີວິດຢູ່ທີ່ນັ້ນ. ຖ້າໄດ້ຢູ່ຮ່ວມກັບພວກເຂົາ ແຫ້ງອາດບໍ່ຮູ້ສຶກ ໂດດດ່ຽວຄືຢູ່ທີ່ລອນດອນ. ຢູ່ທີ່ຝະລັ່ງ ແຫ້ງຄິດວ່າ ອາດຈະເປັນການສະດວກຫລາຍກວ່າໃນການຕິດຕາມສະຖານະການທາງການເມືອງຢູ່ອິນດູຈີນ ຊຶ່ງເປັນເຂດໜຶ່ງທີ່ມີຫລາຍເຫດການພວມເກີດຂຶ້ນຢ່າງດູເດືອດ.

ໃນເດືອນພຶດສະພາ ປີ ໑໙໑໖, ການເຮັດລັດຖະປະຫານໂດຍທະຫານຢູ່ ນະຄອນເວ້ ເພື່ອຕ້ານພວກລ່າເມືອງຂຶ້ນຝະລັ່ງ ແລະ ໂດຍຢູ່ໃຕ້ການນຳຂອງເຈົ້າຊີວິດຢຸຍເຕິນ ປະສົບຄວາມປະລາໄຊ. ຫລັງຈາກດັບສູນການລຶບລິດກະບົດດັ່ງກ່າວແລ້ວ, ອຳນາດປົກຄອງລ່າເມືອງຂຶ້ນ ກໍໄດ້ເນລະເທດເຈົ້າຊີວິດ ຢຸຍເຕິນໄປຢູ່ ດອນເຣອູຍນີອົງ. ໃນເດືອນສິງຫາປີ ໑໙໑໗ ຢູ່ເມືອງຖາຍງວຽນ ພວກລ່າເມືອງຂຶ້ນຝະລັ່ງພັດໄດ້ດັບມອດການລຸກຮື້ຂຶ້ນປະກອບອາວຸດຂອງອ້າຍນ້ອງກະຕ່ຽວແດງ ໃຫ້ຈົມລົງໃນທະເລເລືອດ.

ແຫ້ງຂຽນຈົດໝາຍໄປຫາ ຟານຈູຈິງ ຢູ່ປາຣີຕາມບ່ອນຢູ່ທີ່ເພິ່ນຮູ້ໂດຍບັງເອີນ. ຟານຈູຈິງພ້ອມດ້ວຍຄົນອື່ນໆຈຳນວນໜຶ່ງຖືກຈັບໃນປີ ໑໙໐໘ ໃນຂໍ້ຫາເຂົ້າຮ່ວມຕໍ່ສູ້ຂອງມະຫາຊົນຕ້ານຝະລັ່ງແລ້ວ ຟານຈູຈິງ ຖືກສານລ່າເມືອງຂຶ້ນຕັດສິນປະຫານຊີວິດ. ແຕ່ວ່າພວກລ່າເມືອງຂຶ້ນບໍ່ສາມາດປະຕິບັດຕາມຄຳຕັດສິນໄດ້. ຟານຈູຈິງ ມີຊື່ສຽງຢູ່ໃນວົງການປະຊາທິປະໄຕຂອງຝະລັ່ງເປັນຢ່າງດີ. ຍ້ອນການຢືນມືເຂົ້າໄປຊ່ວຍເຫລືອຂອງສັນນິບາດ ເພື່ອສິດທິມະນຸດ ແລະ ຄຳປະທ້ວງອັນຮຸນແຮງຂອງຊັງ ໂຊແຣດ ຜູ້ນຳ ບັນດານັກສັງຄົມນິຍົມຝະລັ່ງນັ້ນ ການຕັດສິນປະຫານຊີວິດຖືກປ່ຽນມາເປັນການສົ່ງໄປຢູ່ຄຸກ ຢູ່ເທິງເກາະປູໂລໂກນດາວ.ສາມປີຈາກນັ້ນ ພວກລ່າເມືອງຂຶ້ນຝະລັ່ງສົ່ງເພິ່ນໄປຢູ່ຝະລັ່ງ ຢູ່ພູ້ນ ຟານຈູຈິງດຳລົງຊີວິດຢູ່ພາຍໃຕ້ການຄວບຄຸມຂອງຕຳຫລວດຢ່າງເຄັ່ງຄັດ.

ຟານຈູຈິງ ມີສ່ວນຮ່ວມຢູ່ໃນຊາຕາກຳຂອງແທ່ງ, ເພິ່ນໃຫ້ສັນຍາວ່າ ເວລາໃດ ແທ່ງມາຮອດປາຣີ ເພິ່ນຈະຊອກວຽກ ແລະ ຊອກທີ່ພັກໃຫ້. ທ້າຍປີ ໑໙໑໗ ແທ່ງເດີນທາງຂ້າມຊ່ອງແຄບລາ-ມັງ ໄປຮອດຝະລັ່ງ ໃນຊ່ວງເວລາທີ່ປະເທດນີ້ກຳລັງ ຊຸດຊຸມຄອງສູ້ຮົບ.

ເມື່ອມາຮອດປາຣີ ແທ່ງໄດ້ຊອກຫາເຮືອນຫລັງໜຶ່ງຊຶ່ງຈັດຢູ່ປະເພດທຳມະດາ ຕັ້ງຢູ່ທາງຖະໜົນໂກບະແລັງ ອັນງຽບສະຫງົບ ເປັນເຮືອນຂອງທະນາຍຄວາມ ຟານວັນເຈື່ອງ ຊຶ່ງປັນໃຫ້ແທ່ງຢູ່ຫ້ອງໜຶ່ງອັນແຄບໆ. ພໍ່ເຖົ້າຟານຈູຈິງ ກໍໄດ້ເປີດຮ້ານຖ່າຍຮູບຢູ່ນີ້ເອງ ແລະ ແທ່ງກໍຖືກຮັບເຂົ້າເຮັດວຽກຄືເປັນຊ່າງຕົບແຕ່ງຮູບ. ແຕ່ລາວ ຍັງນ້ອຍ, ເວລາຮຽນຫັດຂຽນງາມ ແທ່ງຂຽນດ້ວຍປີກນົກໄດ້ຢ່າງຄ່ອງມື ດັ່ງນັ້ນອີກ ບໍ່ດົນແທ່ງເລີຍກາຍເປັນຊ່າງຕົບແຕ່ງຮູບຜູ້ຊຳນານ. ລູງເຈື່ອງ ເຕັມໃຈຊ່ວຍແທ່ງໃຫ້ລຶ້ງເຄີຍກັບຕົວເມືອງ. ສະເພາະແທ່ງແລ້ວ ຖືວ່າລູງເຈື່ອງເປັນປັນຍາຊົນຮຸ່ນໃໝ່. ເພິ່ນຮູ້ຈັກມັກຄຸ້ນກັບຄົນຝະລັ່ງຜູ້ກ້າວໜ້າຫລາຍຄົນ ເຊັ່ນ ນັກປະພັນ, ນັກແຕ້ມ, ນັກການເມືອງ; ເພິ່ນເອງກໍນັກການເມືອງ, ພິເສດແມ່ນບັນດາທິດສະດີສັງຄົມນິຍົມ. ຢູ່ເທິງໂຕະເຮັດວຽກຂອງເພິ່ນ ຍາມໃດກໍເຫັນປຶ້ມປະພັນຂອງບັນດາຜູ້ໃຫ້ກຳເນີດລັດທິມາກ . ຫ້ອງເຮືອນຢູ່ຖະໜົນໂກບະແລັງ ກາຍເປັນບ່ອນນັດພົບຂອງຄົນຫວຽດນາມຕ່າງດ້າວ.

ໃນຊຸມນີ້ທຳອິດ ສິ່ງທີ່ເປັນຄວາມສຸກອັນໃຫຍ່ຫລວງຂອງແທ່ງແມ່ນ ການໄດ້ຍ່າງເລາະຫລິ້ນຢູ່ຕາມເສັ້ນທາງຕ່າງໆທີ່ປູຫີນອັນເກົ່າແກ່ ຂອງຕົວເມືອງປາຣີ. ເສັ້ນທາງເຫລົ່ານີ້ບໍ່ມີຫຍັງແຕກຕ່າງກັບປຶ້ມປະຫວັດສາດເຫລັ້ມໜຶ່ງທີ່ມີຮູບຄວັດດ້ວຍຫີນ. ແມ່ນແຕ່ໃນປາງສົງຄາມ ນະຄອນແຫ່ງນີ້ກໍຍັງບໍ່ສູນເສຍຮູບໂສມແຫ່ງຄວາມງາມ ຕະຫລອດການ ແລະ ແຮງດູດດຶງຢ່າງແປກປະຫລາດຂອງມັນ. ຢູ່ແຫ່ງນີ້ ທາງແຕ່ລະເສັ້ນ, ເຮືອນແຕ່ລະຫ້ອງ ເກືອບວ່າຫີນແຕ່ລະກ້ອນຢູ່ເທິງໜ້າທາງ ລ້ວນແຕ່ຍັງຮັກສາໄວ້ ຊຶ່ງຮ່ອງຮອຍຂອງບັນດາຂັ້ນສູ້ຮົບປະຕິວັດອັນຟົດເດືອດ ທີ່ໄດ້ດຳເນີນມາຫລາຍຄັ້ງໃນອະດີດຕະການ. ເກືອບ ໑໐໐ ປີມານີ້ ຄືແຕ່ທ້າຍສະຕະວັດທີ I8 ມາຮອດຊຸມປີ 70 ຂອງສະຕະວັດທີ I9 , ປາຣີ ຍາມໃດກໍມີບົດບາດເປັນແບບຢ່າງໃນພາລະກິດປະຕິວັດ ທັງເປັນທວນໄຟເບື້ອງທາງຂອງການປະຕິວັດໃຫ້ແກ່ນະຄອນຫລວງຂອງບັນດາປະເທດ ໃນທະວີບເອີລົບຕ່າງໆ ໄດ້ສືບທອດ. ບັນດານັກຮົບປະຕິວັດຢູ່ທົ່ວທາທະວີບລ້ວນແຕ່ມຸ່ງໜ້າໄປຫາປາຣີ ເພື່ອຈະຟັງສຽງເວົ້າອັນຟົດເດືອດຂອງປະຫວັດສາດ ແລະ ແນມເບິ່ງໂລງ

ຮ່າງແຫ່ງການຕໍ່ສູ້ໃນອະນາຄົດທີ່ຈະເກີດຂຶ້ນຢູ່ໃນປະເທດຂອງຕົນ ໂດຍຜ່ານແສງສະຫວ່າງຂອງເຫດການໃນອະດີດ. ກ.ມາກ ແລະ ຟ.ອັງແກນ ກໍໄດ້ດຳລົງຊີວິດ ແລະ ເຮັດວຽກຢູ່ປາຣີເຫມືອນກັນ. ວ.ອີ.ເລນິນກໍໄດ້ດຳລົງຊີວິດຢ່າງເຕັມໄປດ້ວຍຫມາກຜົນຢູ່ໃນຄຸ້ມມາຣີໂອສ ເປັນເວລາສາມປີ. ປາຣີ ຍັງຈາລຶກຊື່ຂອງນັກປະຕິວັດຜູ້ທີ່ມີຊື່ສຽງເປັນສິບໆແລະຮ້ອຍຄົນຈາກບັນດາປະເທດໃນໂລກໄວ້ຢ່າງເລິກເຊິ່ງ. ເມື່ອວັນເວລາຜ່ານໄປແລ້ວຊື່ສຽງນັກຮັກຊາດຫວຽດນາມຄົນຫນຶ່ງຊຶ່ງໃນເວລານັ້ນ ຫລາຍຄົນຍັງບໍ່ຮູ້ຈັກ ກໍໄດ້ເພີ່ມຕື່ມເຂົ້າໃນຖັນແຖວຂອງບັນດານັກປະຕິວັດເຫລົ່ານັ້ນ. ປະຈຸບັນຄົນຜູ້ຫນຶ່ງທີ່ຍັງບໍ່ມີ ຊື່ສຽງຜູ້ນີ້ແຕ່ມີຈິດໃຈຮັກຊາດອັນດູດດື່ມກຳລັງຍ່າງຢູ່ເທິງຖະຫນົນເມືອງປາຣີ, ຕໍ່ຫນ້າເພິ່ນນັ້ນບັນດາຮູບພາບອັນຍິ່ງໃຫຍ່ຊຶ່ງເຄີຍໄດ້ອ່ານຫລືເຄີຍໄດ້ຟັງໃນເມື່ອກ່ອນນັ້ນມາບັດນີ້ກຳລັງປະກົດຕົວຂຶ້ນໃຫ້ເຫັນ. ໃນຫລາຍປີທີ່ຊັດເຊພະເນຈອນໄປນັ້ນແທ່ງຄິດຮອດເພື່ອນຮ່ວມຊາດດັ່ງນັ້ນທັນທີທີ່ມາພັກຢູ່ປາຣີນີ້ທຳອິດເພິ່ນກໍໄປຢ້ຽມຢາມຄຸ້ມລາແຕັງຊຶ່ງສ່ວນໃຫຍ່ ຄົນຫວຽດນາມຕ່າງດ້າວມາຊອກຢູ່ທຳກິນແລະພຳນັກຢູ່ໃນຄຸ້ມນີ້. ທຸກໆຕອນແລງເພິ່ນໄດ້ມາທີ່ຮ້ານອາຫານຂອງເພື່ອນຮ່ວມຊາດ. ກິນກາເຟຫວຽດນາມທີ່ປຸກແລະດຳເຂັ້ມກິນນ້ຳປາ ພິເສດອັນເປັນສິ່ງຊິນເຄີຍສຳລັບຄົນຫວຽດນາມທັງຫມົດໄດ້ສົ່ງກິ່ນຫອມຫວນທົ່ວ.. ບໍລິເວນຮ້ານ. ຢູ່ຫວຽດນາມຄົນຫວຽດນາມມັກເວົ້າວ່າ: ຜູ້ໃດໄປຢູ່ຕ່າງຖິ່ນດົນນານ, ນອນກາງຄືນມັກຝັນວ່າຕົນເອງໄດ້ກິນນ້ຳປາຊຸ້ນລະ.

ໄລຍະນັ້ນ ຄົນຫວຽດນາມຕ່າງດ້າວທີ່ອາໄສຢູ່ຝະລັ່ງ ຍັງບໍ່ມີອົງການຈັດຕັ້ງຂອງຕົນເອງເທື່ອ. ຫລາຍຄົນ ເຖິງວ່າໄດ້ພັດພາກຈາກບ້ານເກີດເມືອງນອນຂອງຕົນກໍຕາມແມ່ນພໍໃຈນຳຊີວິດຂອງຕົນ ເພາະວ່າຢູ່ນີ້ ພວກເຂົາຫາລ້ຽງຊີບງ່າຍກວ່າ ຢູ່ປະເທດຫວຽດນາມເມືອງຂຶ້ນ. ຊາວຫນຸ່ມສ່ວນໃຫຍ່ແມ່ນນັກຮຽນ ນັກສຶກສາທີ່ໄດ້ຮັບທຶນຈາກລັດຖະບານ ຫລືແມ່ນພວກລູກຂອງຄອບຄົວຫວຽດນາມທີ່ຮັ່ງມີ. ພວກເຂົາຈຳນວນ ຫລວງຫລາຍຂາດນ້ຳໃຈຮັກຊາດ, ຂາດຄວາມເປັນຫ່ວງເປັນໃຍນຳບ້ານເກີດເມືອງນອນທີ່ຖືກພວກລ່າເມືອງຂຶ້ນຢຽບຢ່ຳ. ແທ່ງເອງກໍມັກໂອ້ລົມສົນທະນາກັບຫມູ່ຊາວຫນຸ່ມທີ່ບໍ່ຊ່າງຄິດຕຶກຕອງເຫລົ່ານີ້ຢູ່ເລື້ອຍໆ ແລະ ພະຍາຍາມປຸກລະດົມນ້ຳໃຈຮັກປະເທດຊາດຂຶ້ນໃນຫມູ່ຊາວຫນຸ່ມພວກນັ້ນ. ເພິ່ນມັກເລົ່າເລື່ອງຄວາມທຸກຍາກລຳບາກຂອງປະຊາຊົນ ແລະອະດີດຕະການອັນພິລະອາດຫານຂອງຊາດສູ່ພວກເຂົາຟັງ.

ໂດຍໄດ້ຮັບຄວາມເຄົາລົບ ນັບວັນນັບສູງຂຶ້ນຈາກຫມູ່ເພື່ອນຮ່ວມຊາດຫວຽດນາມ

ຕ່າງດ້າວ, ແຫ່ງກໍກາຍເປັນໜຶ່ງໃນຈຳນວນຜູ້ນຳພາໃນການພົບປະ ແລະ ການປະຊຸມ ຊຶ່ງມີໜ້ອຍທີ່ສຸດໃນເວລານັ້ນ. ດັ່ງນັ້ນ, ມັນບໍ່ແມ່ນເລື່ອງບັງເອີນເລີຍ ທີ່ເພິ່ນກາຍມາເປັນໜຶ່ງໃນຈຳນວນຜູ້ກໍ່ຕັ້ງອົງການຈັດຕັ້ງທຳອິດຂອງຊາວຫວຽດນາມຕ່າງດ້າວທີ່ອາໄສຢູ່ຝະລັ່ງຄື ສະມາຄົມຊາວຫວຽດນາມຜູ້ຮັກຊາດ, ເພິ່ນຍັງເປັນໜຶ່ງໃນບັນດາສະມາຊິກຜູ້ຫາວຫັນທີ່ສຸດຂອງສະມາຄົມເຊັ່ນດຽວກັນ.

ໃນຕອນແລງກໍຄືໃນມື້ພັກ ແຫ່ງນັ່ງອ່ານປຶ້ມຢ່າງເຕີງນານໃນຫ້ອງສະໝຸດແຊງ-ເຊີແນວວີເຢ ຢູ່ຖະໜົນປັງເຕອົງ. ຢູ່ປາຣີ ເປັນຄັ້ງທຳອິດທີ່ແຫ່ງໄດ້ອ່ານ ບົດປະພັນຂອງເຊັກສະເປຍ, ດິກແກນ, ຫລູ ຊິນ, ວິກຕໍ ຮູຍໂກ, ເອມິນ ໂຊລາ.

ວັນນະກຳຂອງເລບ ໂຕນສະໂຕຍ ອັດສະລິຍະບຸລຸດຂອງວັນນະຄະດີລັດເຊຍດຶງດູດຈິດໃຈຂອງແຫ່ງເປັນພິເສດ ແລະ ເຮັດໃຫ້ເພິ່ນຫລົງໄຫລນຳຕະຫລອດຊີວິດ. ເພິ່ນອ່ານຢ່າງຫິວກະຫາຍ "ສົງຄາມ ແລະ ສັນຕິພາບ", "ອານນາ ກາເຣນີນາ ", " ການຟື້ນຊີບ" ທີ່ແປເປັນພາສາຝະລັ່ງ. ຄວາມເລິກເຊິ່ງທາງດ້ານປັດຊະຍາຂອງບັນດາບົດປະພັນອັນລ້ຳຄ່າດັ່ງ ກ່າວ, ຄວາມຄຽດແຄ້ນຕໍ່ສົງຄາມ ຕໍ່ລະບອບສັກດີນາ ອຳນາດອ້າຍດຽວຕໍ່ສາດສະໜາແລະລະບອບທີ່ບໍ່ມີຄວາມຍຸດຕິທຳທີ່ເຮັດໃຫ້ປະຊາຊົນຕົກ ຢູ່ໃນສະພາບລຳບາກແຄ້ນແສນສາຫັດ ສິ່ງເຫລົ່ານັ້ນເຮັດໃຫ້ແຫ່ງນິຍົມຊົມຊອບ ຢ່າງສຸດໃຈ. ແຫ່ງຕິດອົກຕິດໃຈນຳພາສາທີ່ກະທັດລັດງ່າຍດາຍ ແລະ ສົດໃສ ຂອງບົດປະພັນເລບ ໂຕນສະໂຕຍ. ຕອນທີ່ຕິດໃຈຫລາຍແມ່ນຕອນທີ່ເວົ້າເຖິງການໄປລ່າເນື້ອໃນ "ສົງຄາມ ແລະ ສັນຕິພາບ", ຈົນວ່າແຫ່ງໄດ້ຈົດໄວ້ໃນປຶ້ມບັນທຶກຂອງຕົນວ່າ " ຕ້ອງຂຽນແຕ່ສິ່ງທີ່ຕົນເອງໄດ້ເຫັນ ແລະ ສຳຜັດດ້ວຍຕົນເອງ ".

ວັນໜຶ່ງແຫ່ງບັງເອີນໄດ້ພົບໜັງສືພິມທີ່ໄດ້ລົງພິມນະວະນິຍາຍເລື່ອງ "ແປວໄຟ" ຂອງນັກປະພັນໜຸ່ມຝະລັ່ງອັງຣີບາກບຸສ ຢ່າງເປັນລຳດັບ.ດ້ວຍຄວາມຕື່ນເຕັ້ນເພິ່ນອ່ານຖ້ອຍຄຳທີ່ປະທັບໃຈແລະເຕັມໄປດ້ວຍສຳນຽງເສົ້າສະຫລົດໃຈທີ່ວ່າ"...ນັກລົບ ທີ່ໜ້າສົງສານທັງຫລາຍເອີຍ!ແມ່ນພວກເຈົ້ານັ້ນລະທີ່ເປັນຜູ້ສູ້ຮົບໃນສົງຄາມນີ້.ພວກເຈົ້າ ນັ້ນລະທີ່ເປັນກຳລັງອັນມີອະນຸພາບແຕ່ຍັງບໍ່ທັນຖືກໃຊ້ເຂົ້າໃນພາລະກິດທີ່ດີງາມເທື່ອ. ພວກເຈົ້າຍັງແມ່ນຝູງຊົນທີ່ຕ້ອຍຕ່ຳສີໜ້າຂອງພວກເຈົ້າແຕ່ລະຄົນແມ່ນສີໜ້າຂອງໂລກທີ່ເສົ້າໂສກເສຍໃຈ!..."ໃນຄວາມຊົງຈຳຂອງແຫ່ງມີບັນດາຕົວເມືອງແລະບ້ານນອກປະເທດຝະລັ່ງພາກເໜືອທີ່ຖືກທຳລາຍ,ບັນດາຂະບວນລົດໄຟຮັບຄົນເຈັບແລ່ນມາຈາກສະໜາມ

ຣີບເຂົ້າມາປາຣີເພື່ອນຮ່ວມຊາດຂອງເພິ່ນເປັນພັນໆຄົນອິດເມື່ອຍອ່ອນແຮງຖືກຕີ ເລກຫມາຍຢູ່ທີ່ຄໍແລະຫລັງດ້ວຍທາດເຄມີຖືກສົ່ງໃຫ້ໄປຕາຍຕາງສິດຜົນປະໂຫຍດຂອງ "ປະເທດແມ່" ແຕ່ພວກຝະລັ່ງຊ້ຳພັດຫລອກລວງໂດຍເອີ້ນພວກເຂົາເຈົ້າເປັນ" ຜູ້ປົກປ້ອງຄວາມຍຸຕິທຳ ແລະ ອິດສະຫລະພາບ".

ສະໄຫມນັ້ນ ແຫ່ງຍັງບໍ່ຮູ້ຈັກຄວາມເວົ້າຂອງ ມ. ກອັກກີ ທີ່ໄດ້ເວົ້າກ່ຽວກັບອັງຣີບາກບຸສວ່າ "ເພິ່ນເປັນຄົນ ທີ່ມອງເຫັນທາດແທ້ຂອງສົງຄາມໄດ້ເລິກເຊິ່ງກວ່ານັກປະພັນຮຸ່ນກ່ອນ ບໍ່ວ່າຄົນໃດ, ແລະ ຊີ້ໃຫ້ທຸກຄົນເຫັນເຫວເລິກແຫ່ງຄວາມຫລົງຜິດ ຂອງພວກເຂົາເຈົ້າ". ແຕ່ວ່າຖ້ອຍຄຳເຫລົ່ານັ້ນ ອາດໃຊ້ໄດ້ເພື່ອສະແດງເຖິງອິດທິພົນ ອັນເລິກເຊິ່ງຂອງປຶ້ມ. ທີ່ຕ້ານສົງຄາມຫົວນີ້ ຂອງ ບາກບຸສ ທີ່ມີຕໍ່ແຫ່ງ. ເພິ່ນມັກເວົ້າຊ້ຳແລ້ວຊ້ຳອີກກ່ຽວກັບປະໂຫຍກສຸດທ້າຍຂອງປຶ້ມ ນະວະນິຍາຍເຫລັ້ມນີ້: "ຄົນທີ່ຖືກກຳເນີດຈາກປະຊາຊົນ ຈະເຫັນ ການປະຕິວັດທີ່ພວກເຂົາເຈົ້າຍັງບໍ່ທັນຮູ້ເທື່ອ, ການປະຕິວັດດັ່ງກ່າວດີເລີດກວ່າການປະຕິວັດໃນເມື່ອກ່ອນທັງຫມົດ; ພວກເຂົາເຈົ້ານັ້ນລະເປັນ ຕົ້ນກຳເນີດຂອງການປະຕິວັດດັ່ງກ່າວ: ຄຳເວົ້າ "ສະເຫມີພາບ" ກຳລັງດັງອອກຈາກລຳຄໍພວກເຂົາ ແລະ ພວກເຂົາກໍເວົ້າຊ້ຳແລ້ວຊ້ຳອີກ "ສະເຫມີພາບ " !

ຊຸມອາທິດທຳອິດຢູ່ຝະລັ່ງ ແຫ່ງໄດ້ຮູ້ກ່ຽວກັບເຫດການອັນໃຫຍ່ໂຕ. ທ້າຍເດືອນຕຸລາປີ ໑໙໑໗ ມີຂ່າວມາຈາກ ເປໂຕຣກຣາດ ກ່ຽວກັບການປະຕິວັດຄັ້ງໃຫຍ່ຢູ່ປະເທດລັດເຊຍ. ຫນັງສືພິມປາຣີ ເອີ້ນການປະຕິວັດດັ່ງກ່າວວ່າ "ການລັດຖະປະຫານໂບນເຊວິກ". ເຊັ່ນດຽວກັນກັບເພື່ອນຝະລັ່ງຫລາຍຄົນຂອງເພິ່ນ ແຫ່ງບໍ່ອາດຈະຮັບຮູ້ໄດ້ໃນທັນໃດໂລດ ກ່ຽວກັບຄວາມຫມາຍຄັ້ງປະຫວັດສາດລະດັບທົ່ວໂລກຂອງການປະຕິວັດທີ່ ຍິ່ງໃຫຍ່ຢ່າງແທ້ຈິງນັ້ນ. ແຕ່ຄວາມສາມາດເດົາເຫດການ ແລະ ການອ່ານຫນັງສືພິມ ສັງຄົມນິຍົມໄດ້ຊ່ວຍໃຫ້ເພິ່ນສະຫລຸບໄດ້ ສິ່ງທີ່ສຳຄັນຄື: ຢູ່ປະເທດລັດເຊຍ ເປັນຄັ້ງທຳອິດໃນປະຫວັດສາດໂລກທີ່ ຊາວຜູ້ອອກແຮງງານໄດ້ຍຶດເອົາອຳນາດການປົກຄອງມາຢູ່ ໃນກຳມື. ດ້ວຍຈິດໃຈປ່ຽມລົ້ນຂອງຄົນຮັກຊາດ ແຫ່ງໄດ້ຊົມເຊີຍໄຊຊະນະຂອງຊາວຜູ້ອອກແຮງງານປະເທດລັດເຊຍ. ສີ່ສິບປີຕໍ່ມາ ເມື່ອໄດ້ຂຶ້ນເປັນປະທານພັກຂອງຊາວ ກອມມູນິດຫວຽດນາມ ແລະ ເປັນປະທານປະເທດຫວຽດນາມທີ່ມີອິດສະຫລະພາບ ເພິ່ນໄດ້ເວົ້າຢ່າງສະຫງ່າຜ່າເຜີຍວ່າ ສຳລັບເພິ່ນເອງກໍຄືສຳລັບບັນດານັກປະຕິວັດ ຫວຽດນາມຫມົດທຸກຄົນ ອິດທິພົນອັນມີກຳລັງວັງຊາຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ປຽບ

"ເຫມືອນກັນກັບບໍ່ນ້ຳທີ່ຄົນເດີນທາງຊອກຫາມານານ, ເຫມືອນກັນກັບອາຫານທີ່ເຮັດໃຫ້ອີ່ມ ແລະ ນຳເອົາກຳລັງມາໃຫ້ຕື່ມ.

ມັນເປັນເວລາດົນນານຫລາຍປີ "ທີ່ຕ້ອງຫາລ້ຽງຊີບ" ຢ່າງແສນລຳບາກ ແລະ ທີ່ຕ້ອງຊັດເຊພະເນຈອນຢ່າງຂົມຂື່ນຈາກປະເທດນີ້ໄປສູ່ປະເທດນັ້ນ ຈາກທະວີບນີ້ ໄປສູ່ທະວີບນັ້ນ, ປະສົບການຈາກຊີວິດດັ່ງກ່າວບວກໃສ່ອິດທິພົນອັນດີງາມ ຂອງການປະຕິວັດເດືອນຕຸລາ ທັງຫມົດນີ້ໄດ້ເປັນຂີດຫມາຍແຫ່ງບາດລ້ຽວອັນສຳຄັນ ໃນການປະກອບສ້າງທັດສະນະການເມືອງຂອງນັກຮັກຊາດຫນຸ່ມນ້ອຍ. ເຖິງແມ່ນວ່າເພິ່ນຍັງຊອກ ບໍ່ເຫັນ "ດາບວິເສດ" ກໍ່ຕາມ. ແຕ່ເພິ່ນໄດ້ມອງເບິ່ງໂລກນີ້ໃນແບບທີ່ແຕກຕ່າງກັບ ເມື່ອກ່ອນຢ່າງສິ້ນເຊີງ. ສຳລັບເພິ່ນຄວາມສຳນຶກນາມມະທຳເຊັ່ນ "ລັດທິຈັກກະພັດ" " ລັດທິນາຍທຶນ" "ລັດທິລ່າເມືອງຂຶ້ນ" ບັດນີ້ ໄດ້ກາຍມາເປັນສິ່ງທີ່ຮູບປະທຳ ແລະ ສຳພັດໄດ້. ບໍ່ພຽງແຕ່ຢູ່ຫວຽດນາມເທົ່ານັ້ນ ແຕ່ວ່າຢູ່ທົ່ວໂລກອັນກວ້າງໃຫຍ່ໄພສານນີ້ຍັງມີມະຫາຊົນຜູ້ອອກແຮງງານ ບັນດາຊົນຊາດ ແລະ ບັນດາປະເທດທີ່ຖືກກົດຂີ່ ຂູດຮີດ ຕ້ອງດຳລົງຊີວິດໃນສະພາບທຸກຍາກອຶດຫິວ ແລະ ບໍ່ມີຄວາມຍຸດຕິທຳ. ຈາກການພົບປະ ໂອ້ລົມກັບຈຳພວກຄົນທີ່ມີຜິວພັນ ແລະຖານະໃນສັງຄົມຕ່າງກັນ ເພິ່ນພໍສະຫລຸບໄດ້ວ່າ ແມ່ນແຕ່ຢູ່ທະວີບເອີລົບກໍ່ຍັງມີຄົນທຸກຍາກທີ່ໄດ້ຮັບເຄາະກຳ ແລະ ຖືກກົດຂີ່ຫນີບເຕັງ. ເຂົາເຈົ້າບໍ່ຄືກັບພວກລ່າເມືອງຂຶ້ນຢູ່ບ້ານເກີດເມືອງນອນຂອງເພິ່ນຈັກດີ້. ຄົນຜິວດຳຢູ່ທະວີບອາຟະລິກາມີຊີວິດຢ່າງຢູ່ທຸກຈົນ ແລະ ຕ່ຳຕ້ອຍເຊັ່ນດຽວກັນກັບຄົນຜິວເຫລືອງ ຢູ່ທະວີບອາຊີ. ເພິ່ນຮັບຮູ້ດ້ວຍຄວາມຂົມຂື່ນວ່າ ພວກລ່າເມືອງຂຶ້ນຖືວ່າຊີວິດຂອງຊາວຜູ້ຖືກກົດຂີ່ມີຄ່າບໍ່ແພງກວ່າເງິນຫນຶ່ງບີ້ ເຖິງວ່າຄົນເຫລົ່ານັ້ນ ຈະເປັນຄົນຜິວດຳ ຫລື ຄົນ ອາຊີກໍຕາມ.

ສຸພາສິດຊາວບ້ານມີຄວາມຫມາຍຖືກຕ້ອງທີ່ສຸດວ່າ "ຢູ່ບ່ອນໃດກໍຕາມ ກາກໍດຳຢູ່ຢ່າງນັ້ນລະ". ແຫ່ງກໍສະຫລຸບໄດ້ອີກຂໍ້ຫນຶ່ງວ່າ: ເຊັ່ນດຽວກັບຝະລັ່ງ ອາເມລິກາ ອັງກິດ ເຢຍລະມັນ ຍີ່ປຸ່ນ ລ້ວນແຕ່ແມ່ນບັນດາມະຫາອຳນາດຈັກກະພັດ ທີ່ເປັນເຈົ້າເມືອງຂຶ້ນບໍ່ຫລາຍກໍຫນ້ອຍ. ບັນດາຊົນຊາດທີ່ຖືກຂູດຮີດບໍ່ຕ້ອງຄອງຄອຍຫຍັງ ນຳການຊ່ວຍເຫລືອຈາກພວກເຂົາ.

ແຕ່ວ່າຄວາມຄຽດແຄ້ນຂອງເພິ່ນຕໍ່ພວກລ່າເມືອງຂຶ້ນ ແຕກຕ່າງຢ່າງສິ້ນເຊີງກັບຊາວຜູ້ຮັກຊາດຫວຽດນາມອື່ນໆ ຢູ່ບ່ອນວ່າ ເພິ່ນກໍ່ບໍ່ມີແນວຄິດຈຳແນກຜິວພັນຈັກດີ້. ສິ່ງ

ນີ້ໄດ້ຊ່ວຍສ້າງເພິ່ນໃຫ້ມີໂລກະທັດສາກົນນິຍົມອັນສູດກົກສຸດປາຍເທື່ອລະກ້າວ, ຊ່ວຍໃຫ້ຮັບຮູ້ກ່ຽວກັບຜົນປະໂຫຍດອັນລວມຂອງຊາວຜູ້ອອກແຮງງານຢູ່ໃນບັນດາປະເທດນາຍທຶນ ແລະ ບັນດາປະເທດເມືອງຂຶ້ນທີ່ຖືກຈົນຈຸ້ມປົກຄອງຂອງບັນດາປະເທດນັ້ນຊູດຣີດ. ຊີວິດປະຈຳວັນຢູ່ປາຣີ ໄດ້ເຮັດໃຫ້ເພິ່ນເຊື່ອວ່າ ຊາວຜູ້ອອກແຮງງານຝະລັ່ງ ແລະ ປະຊາຊົນຫວຽດນາມລ້ວນແຕ່ມີສັດຕູໂຕດຽວກັນ. ການຄົ້ນພົບສັດຈະທຳດັ່ງກ່າວ ໄດ້ນຳເພິ່ນເຂົ້າຢູ່ໃນຖັນແຖວຂອງພາກສ່ວນປະຕິວັດສຸດຂີດຢູ່ໃນຈົນຈຸ້ມກຳມະກອນຝະລັ່ງ ເທື່ອລະກ້າວ.

ແຫ່ງອ່ານໜັງສືພິມ "ຊຸຍມານິເຕ" * ຢ່າງເປັນປົກກະຕິ ຊຶ່ງເປັນໜັງສືພິມຂອງຊາວສັງຄົມນິຍົມຝະລັ່ງ. ເພິ່ນຊອກທຸກວິທີທາງ ເພື່ອໃຫ້ໄດ້ເຂົ້າຮ່ວມ ໃນທຸກການໂຮມຊຸມນຸມມິດຕິງ, ກອງປະຊຸມ ແລະ ການຖົກຖຽງ ໂດຍແມ່ນພັກສັງຄົມນິຍົມ ຝະລັ່ງຈັດຕັ້ງຂຶ້ນ, ພັກດັ່ງກ່າວເປັນພັກດຽວເທົ່ານັ້ນໃນຈຳນວນພັກການເມືອງຢູ່ຝະລັ່ງທີ່ໄດ້ຕໍ່ສູ້ປົກປ້ອງປະຊາຊາດເມືອງຂຶ້ນ. ເພິ່ນໄດ້ມີຄວາມພໍໃຈທີ່ໄດ້ຍິນຜູ້ກ່າວຄຳປາໄສ ກ່າວປະນາມ ລັດທິລ່າເມືອງຂຶ້ນ ເຖິງແມ່ນວ່າ ມີຄົນເວົ້າເຖິງບັນຫານີ້ໜ້ອຍທີ່ສຸດໃນການໂຮມຊຸມນຸມມິດຕິງຄັ້ງໜຶ່ງ ເພິ່ນໄດ້ຮູ້ຈັກກັບ ໂປນ ໄວຢັງ-ກູຕົວຣິເອ ຊຶ່ງສັງກັດ ຝ່າຍຊ້າຍຂອງພັກສັງຄົມນິຍົມຝະລັ່ງ ແລະ ທັງເປັນໜຶ່ງໃນຈຳນວນຜູ້ແທນທີ່ໜຸ່ມທີ່ສຸດ ຂອງສະພາແຫ່ງຊາດຂອງຝະລັ່ງ. ໂປນຍັງໄດ້ແນະນຳແຫ່ງໃຫ້ຮູ້ຈັກກັບ ມັກແຊນ ກາແຊັງ,ອັງຣີ ບາກບຸສ. ນັກຮັກຊາດຜູ້ໜຸ່ມນ້ອຍຫວຽດນາມໄດ້ລົງແກ່ວນເທື່ອລະນ້ອຍກັບບັນດານັກເຄື່ອນໄຫວຂອງພັກສັງຄົມນິຍົມ ແລະ ກຳມະບານຝະລັ່ງ.

ໃນຕອນທ້າຍປີ ໑໙໑໘ ການປ່ຽນແປງອັນສຳຄັນໄດ້ເກີດຂຶ້ນໃນຊີວິດ ຂອງແຫ່ງ: ເພິ່ນຖືກຮັບເຂົ້າພັກສັງຄົມນິຍົມຝະລັ່ງ. ນອກຈາກເພິ່ນແລ້ວ ກ່ອນໜ້ານີ້ ຍັງບໍ່ເຄີຍມີຄົນຫວຽດນາມແມ່ນແຕ່ຄົນດຽວທີ່ເປັນສະມາຊິກພັກການເມືອງພັກໃດພັກໜຶ່ງ ຂອງ "ເມືອງແມ່". ເວລານັ້ນ ສະມາຊິກທັງໝົດຂອງພັກສັງຄົມນິຍົມຝະລັ່ງ ມີພຽງແຕ່ ໑໑.໙໗໐ ຄົນ, ເຖິງວ່າກ່ອນສົງຄາມໂລກ ຄັ້ງທີໜຶ່ງ ພັກມີສະມາຊິກ ເກືອບ ໑໐໐.໐໐໐ ຄົນ. ໃນຈຳນວນຄົນຝະລັ່ງ ໒ ລ້ານຄົນທີ່ເສຍຊີວິດ ຢູ່ໃນສະໜາມຮົບ

---

* ນັບແຕ່ປີ ໑໙໐໔ ຫາ ໑໙໒໐ ແມ່ນກະບອກສຽງຂອງ ພັກສັງຄົມນິຍົມ, ນັບຕັ້ງແຕ່ ປີ ໑໙໒໐ ເປັນຕົ້ນມາ ແມ່ນກະບອກສຽງຂອງ ພັກກອມມູນິດຝະລັ່ງ.

ຕ່າງໆ, ມີສະມາຊິກພັກສັງຄົມນິຍົມຫລາຍຄົນ. ບັນດາຜູ້ນຳພັກສັງຄົມນິຍົມຝະລັ່ງ ທີ່ໄດ້ປ່ອນບັດເຫັນດີນຳສົງຄາມ ຕ້ອງເປັນຜູ້ຮັບຜິດຊອບກ່ຽວກັບການເສຍຊີວິດຂອງສະມາຊິກພັກສັງຄົມນິຍົມນັ້ນ. ແທ່ງຖືກຮັບເອົາພັກພ້ອມດ້ວຍຮຸ່ນຄົນ ຊຶ່ງພາຍຫລັງມາໄດ້ເອີ້ນວ່າ: "ຮຸ່ນຄົນທີ່ຜ່ານແປວໄຟສູ້ຮົບ" ເຊິ່ງເປັນຄົນທີ່ໃຫຍ່ອົ້ນໃນບັນຍາກາດທີ່ເຊື່ອມຊຶມ ໄປດ້ວຍແນວຄິດຕ້ານສົງຄາມ, ຕ້ານຈັກກະພັດຢ່າງຮຸນແຮງ, ດ້ວຍເຫດນັ້ນຄົນຮຸ່ນນີ້ ຈຶ່ງບໍ່ຕິດແປດແນວຄິດເຟີ້ຟັນ ແລະ ຄວາມຫລົງຜິດຕ່າງໆຈາກຄົນຮຸ່ນກ່ອນ.

ການເຂົ້າພັກໄດ້ເປີດສັງກາດແຫ່ງການເຄື່ອນໄຫວຂອງນັກປະຕິວັດອາຊີບໃຫ້ແກ່ນັກຮັກຊາດໜຸ່ມນ້ອຍຫວຽດນາມ. ແມ່ນໃນສະໄໝນັ້ນເອງ ທີ່ແທ່ງໃຊ້ນາມແຝງ ຫລືຊື່ລັບວ່າ ຫງວຽນອາຍກວັກ, ຊຶ່ງມີຄວາມໝາຍວ່າ ຫງວຽນ ຜູ້ຮັກຊາດ. ເພິ່ນອາດຕັ້ງຊື່ນີ້ໂລດ ພໍແຕ່ມາຮອດຝະລັ່ງ ເພື່ອໃຫ້ແທດເໝາະຢ່າງເຕັມປ່ຽມກັບຈິດໃຈຮັກມູນເຊື້ອຫວຽດນາມ. ແຕ່ວ່າເອກະສານສະບັບທຳອິດ ທີ່ຢັ້ງຢືນວ່າເພິ່ນນຳໃຊ້ນາມແຝງດັ່ງກ່າວນີ້ ໄດ້ປະກົດຕົວອອກເມື່ອຕົ້ນປີ ໑໙໑໙.

໒

ໃນກາງເດືອນມັງກອນປີ ໑໙໑໙ ປາຣີ ໄດ້ຕ້ອນຮັບບັນດາແຂກຊັ້ນສູງທີ່ມາຈາກຕ່າງປະເທດຢ່າງຄຶກຄື້ນ. ພວກເຂົາເຈົ້າແມ່ນຜູ້ຕາງໜ້າຂອງບັນດາປະເທດນາຍທຶນທີ່ໄດ້ເຂົ້າຮ່ວມສົງຄາມໂລກຄັ້ງທີໜຶ່ງ ທີ່ເດີນທາງມາຍັງນະຄອນຫລວງປະເທດ ຝະລັ່ງ ເພື່ອເຂົ້າຮ່ວມກອງປະຊຸມສັນຕິພາບ. ວົງການຜູ້ກຳອຳນາດໃນປະເທດມະຫາອຳນາດທີ່ຊະນະສົງຄາມຢາກຈະ "ສະຫລຸບສັງລວມຜົນທີ່ໄດ້ຮັບ" ຈາກສົງຄາມໃຫ້ແລ້ວໄວ ເທົ່າໃດຍິ່ງດີ, ຫລືເວົ້າອີກຢ່າງໜຶ່ງ ແມ່ນຢາກສ້າງຮັ່ງຄູນມີດ້ວຍການສວຍໃຊ້ ບັນດາປະເທດທີ່ປະລາໄຊໃນສົງຄາມ. ໜັງສືພິມປາຣີສະບັບຕ່າງໆໄດ້ຮຽກຮ້ອງໃຫ້ທັງຊາດເປັນເອກະພາບກັນ ເພື່ອຈຸດປະສົງເຊັນສົນທິສັນຍາສັນຕິພາບອັນມີຜົນປະໂຫຍດ ຫລາຍທີ່ສຸດສຳລັບການຟື້ນຟູປະເທດຝະລັ່ງທີ່ຍິ່ງໃຫຍ່. ພວກເສດຖີທີ່ອາໄສຢູ່ຕາມຄຸ້ມເສດຖີ ຂອງນະຄອນຫລວງປາຣີທີ່ໄດ້ຫຸ້ມເຫງິນສົ່ງຊື້ອຸປະກອນການທະຫານ, ນັບທັງຜູ້ຖືຫຸ້ນສ່ວນຂະ

ໜາດກາງແລະຂະໜາດນ້ອຍ ພວກເຂົາທັງໝົດລ້ວນແຕ່ຕິດພະຍາດລັດທິໂຊແວັງຢ່າງປ່ວງບ້າ ແລະ ໄດ້ຮຽກຮ້ອງເປັນສຽງດຽວກັນ ໃຫ້ລັດຖະບານເຊັນສົນທິສັນຍາແບບ ທີ່ບັງຄັບໃຫ້ປະເທດເຢຍລະມັນທີ່ປະລາໄຊໃນສົງຄາມຕ້ອງ "ໃຊ້ຄ່າແທນທັງໝົດ".

ຂ່າວກ່ຽວກັບການຮຽກປະຊຸມສັນຕິພາບຢູ່ປາຣີ ໄດ້ດູດດຶງຜູ້ຕາງໜ້າ ຈຳນວນຫລວງຫລາຍຂອງບັນດາປະເທດທີ່ຖືກກົດຂີ່ ມາຍັງປາຣີ. ພວກເຂົາເຈົ້າຮູ້ສຶກ ອົບອຸ່ນດ້ວຍມີຄວາມຫວັງວ່າໃນຂະນະທີ່ມີການແກ້ໄຂບັນຫາວ່າດ້ວຍສະພາບການພາຍຫລັງ ສົງຄາມແລ້ວ ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມກໍ່ຈະຫາງຽງຫູຟັງຄວາມຄິດເຫັນຂອງ ເຂົາເຈົ້າ. "ໂຄງການ ໑໔ ຂໍ້ " ທີ່ມີລັກສະນະຫລອກລວງ ຂອງ ວູດໂຣ ວິນສັນ ປະທານາທິບໍດີແຫ່ງສະຫະລັດອາເມລິກາ ເຊິ່ງໃນນັ້ນມີບາງຂໍ້ທີ່ໄດ້ເວົ້າເຖິງ "ສິດທິ" ຂອງບັນດາປະເທດເມືອງຂຶ້ນ ແລະ ບັນດາປະເທດບໍ່ມີເອກະລາດ ໄດ້ເຮັດໃຫ້ ພວກເຂົາເຈົ້າຈຳນວນຫລາຍຫລົງເຊື່ອ. ຄະນະຜູ້ແທນຂອງຈີນກໍມີໜ້າຢູ່ປາຣີເຊັ່ນກັນ. ຈີນເຂົ້າຮ່ວມສົງຄາມກັບຝ່າຍປະເທດທີ່ຊະນະສົງຄາມ ແລະ ມີຄວາມຫວັງວ່າປະເທດຕົນຈະໄດ້ຮັບເອກະລາດ. ສຳນັກຂ່າວສານຂອງຄະນະຜູ້ແທນເກົາຫລີ ໄດ້ຖືກໄຂຂຶ້ນຢູ່ທີ່ ຖະໜົນຊາໂຕໂດຣ໌, ພວກເຂົາເຈົ້າມາປາຣີ ເພື່ອທວງເອົາສິດປົກຄອງຕົນເອງ. ຢູ່ຕາມທາງອັນຍາວຢຽດສຸດສາຍຕາຂອງວັງແວກໄຊ ຊຶ່ງແຕ່ກ່ອນເປັນພະລາຊະສຳນັກ ຂອງບັນດາເຈົ້າຊີວິດຝະລັ່ງ ແຕ່ໃນປະຈຸບັນເປັນບ່ອນດຳເນີນກອງປະຊຸມນັ້ນມີ ຜູ້ຕາງໜ້າຂອງອິນເດຍ, ໄອແລນ ແລະ ຂອງບັນດາປະເທດອາຣັບ.

ຕອນເຊົ້າມື້ໜຶ່ງ ມີຄົນມາບີບກະລິ່ງເຮືອນເລກທີ ໖, ຖະໜົນໂດບີນີ. ຢູ່ທີ່ນີ້ແມ່ນເຮືອນຂອງຊູນກຳບົງ ຊຶ່ງເປັນອະດີດທູດຝະລັ່ງຢູ່ເຢຍລະມັນ ທັງເປັນສະມາຊິກ ຢູ່ໃນຄະນະຜູ້ແທນຂອງຝະລັ່ງ, ນາງເຊີເນີວີແອວ ຕາບູອິ ຫລານສາວຂອງກຳບົງ ອອກມາເປີດປະຕູເຮືອນ. ພາຍຫລັງມາ ນາງໄດ້ເປັນນັກຂ່າວມີຊື່ສຽງ, ແຕ່ໃນເວລາ ນັ້ນນາງເປັນເລຂາຂອງກຳບົງ. ຜູ້ທີ່ບີບກະດິ່ງນັ້ນ ແມ່ນຊາຍໜຸ່ມຄົນອາຊີ , ຮູບຮ່າງຈ່ອຍ, ໃບໜ້າບອກລັກສະນະວ່າເປັນຄົນເປີດເຜີຍ ແລະ ໜ້າຄົບດວງຕາມົນສົດໃສ. ເພິ່ນທັກທາຍນາງຢ່າງສຸພາບ ແລະ ເວົ້າພາສາຝະລັ່ງດ້ວຍສຳນຽງທີ່ບໍ່ຂອດປານໃດວ່າ:

"ຂ້ອຍມານີ້ ເພື່ອຢາກມອບເອກະສານສະບັບໜຶ່ງ ໃຫ້ທ່ານເອກອັກຄະລາຊະທູດ ".

ສ່ວນນາງ ເຊີເນີວີແອວ ບໍ່ເວົ້າຫຍັງຫລາຍ ຮີບເຊີນແຂກເຂົ້າໃນເຮືອນ, ຈາກ

ນັ້ນ ນາງເຣັດສັນຍານເປັນເຊີງ ບອກແຂກນັ່ງຂ້າງໂຕະຍາວຄວັດລາຍຕາມແບບພະລາ ຊາ. ໂຕະໜ່ວຍນີ້ປະຈຸບັນຍັງວາງໄວ້ໃນຫ້ອງຮັບແຂກຂອງຄອບຄົວ ຕາບູອີ ເໝືອນ ເດີມ. ນາງເອີ່ຍຖາມຊາຍໜຸ່ມວ່າ ເພິ່ນແມ່ນໃຜ.

"ຂ້ອຍຊື່ ຫງວຽນອາຍກວັກ ຂ້ອຍຢາກຂໍພົບທ່ານເອກອັກຄະລາຊະທູດກາໍບົງ".

ຊາຍໜຸ່ມດຶງເອົາແຟ້ມເອກະສານທີ່ມີເຊືອກມັດອອກມາກ່ອນແກ້ເຊືອກ ພີເຈຍ ອອກແລ້ວຍື່ນໃຫ້ນາງ.

" ຂ້ອຍມານີ້ ເພື່ອມອບ ຄໍາຮ້ອງທຸກ ຂອງປະຊາຊົນອິນດູຈີນໃຫ້ທ່ານເອກອັກຄະ ລາຊະທູດ".

ເຫັນໄດ້ໂລດວ່າ ເອກະສານທີ່ຢູ່ໃນແຟ້ມນັ້ນມີລາຍມືທີ່ຂຽນງາມອ່ານງ່າຍ. ແຜ່ນ ທໍາອິດເປັນຈົດໝາຍຝາກເຖິງເຈົ້າຂອງເຮືອນ ໂດຍມີເນື້ອໃນວ່າ "ທ່ານ ເອກອັກຄະ ລາຊະທູດກາໍບົງ ຜູ້ແທນທີ່ມີອໍານາດເຕັມຂອງປະເທດຝະລັ່ງຢູ່ກອງປະຊຸມແວກໄຊ ທີ່ນັບ ຖື ຂ້າພະເຈົ້າຂໍຮຽນທ່ານ ໃນນາມທີ່ຂ້າພະເຈົ້າເປັນຕົວແທນຂອງປະຊາຊົນ ອິນດູຈີນ. ພວກຂ້າພະເຈົ້າແມ່ນປະຊາຊາດທີ່ດ້ອຍພັດທະນາ, ພວກຂ້າພະເຈົ້າຮັບຮູ້ວ່າ ຄວາມສືວິ ໄລຂອງປະເທດທ່ານເປັນແນວໃດ..." ເອກະສານທີ່ຊາຍໜຸ່ມອາຊີຖືມານີ້ຊື່ວ່າ"ສານ ທວງເອົາສິດຂອງປະຊາຊົນຫວຽດນາມ". ສານທວງເອົາສິດມີເນື້ອໃນວ່າ:

"...ໃນຂະນະທີ່ລໍຄອຍວ່າເວລາໃດສິດອັນສັກກາລະຂອງປະຊາຊາດ ໃນການ ຕັດສິນດ້ວຍຕົນເອງ ຈະໄດ້ຮັບການຮັບຮູ້ຢ່າງແທ້ຈິງ, ປະຊາຊົນຂອງອະດີດ ພະລາຊະ ອານາຈັກອານນາມ ຊຶ່ງປະຈຸບັນແມ່ນເຂດປົກຄອງຂອງຝະລັ່ງໃນອິນດູຈີນ, ຂໍສະເໜີ ທວງເອົາສິດດັ່ງຕໍ່ລົງໄປນີ້ ຕໍ່ບັນດາລັດຖະບານປະເທດພັນທະມິດເວົ້າລວມ ແລະ ຕໍ່ລັດ ຖະບານຝະລັ່ງ ເວົ້າສະເພາະ :

- ອະໄພຍະໂທດຢ່າງສົມບູນໃຫ້ແກ່ນັກໂທດການເມືອງຫວຽດນາມ.

- ດັດແກ້ນິຕິບັນຍັດທີ່ມີພົນບັງຄັບໃຊ້ຢູ່ທີ່ອິນດູຈີນ, ຄໍ້າປະກັນທາງດ້ານກົດໝາຍ ໃຫ້ແກ່ຊາວຫວຽດນາມທຸກຄົນໃຫ້ມີສິດເທົ່າທຽມກັນກັບຄົນເອີລົບ, ຍຸບເລີກສານ ພິເສດ ຢ່າງສິ້ນເຊີງ, ເນື່ອງຈາກວ່າອັນນັ້ນເປັນເຄື່ອງມືເພື່ອປາບປາມຊາວຫວຽດນາມ ຜູ້ທີ່ ດີເດັ່ນ.

- ເສລີພາບໃນການຂີດຂຽນ ແລະ ເສລີພາບໃນການສະແດງຄວາມຄິດຄວາມ ເຫັນ.

- ເສລີພາບໃນການສ້າງຕັ້ງສະມາຄົມ ແລະ ເສລີພາບໃນການໂຮມຊຸມນຸມ.

- ເສລີພາບ ໃນການຍົກຍ້າຍ ແລະ ໃນການພັກອາໄສຢູ່ຕ່າງປະເທດ.

- ສິດໃນການສຶກສາ ແລະ ເປີດບັນດາໂຮງຮຽນເຕັກນິກ ແລະວິຊາອາຊີບໃຫ້ແກ່ພົນລະເມືອງຢູ່ທົ່ວບັນດາເຂດແຂວງ.

- ປ່ຽນລະບອບຄຳສັ່ງ ມາເປັນລະບອບກົດຫມາຍ.

- ຢູ່ໃນລັດຖະສະພາຂອງຝະລັ່ງ ຕ້ອງມີຜູ້ແທນທີ່ເປັນຄົນຫວຽດນາມ ປະຈຳຢູ່ ໂດຍແມ່ນປະຊາຊົນຫວຽດນາມເປັນຜູ້ເລືອກເອົາ ເພື່ອເປັນຕົວແທນໃຫ້ແກ່ ຄວາມມຸ່ງມາດປາຖະຫນາຂອງເພື່ອນຮ່ວມຊາດ".

ສອງສາມວັນຈາກນັ້ນ ບັນດາຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ກໍຄືບັນດາຜູ້ແທນສະພາແຫ່ງຊາດຂອງຝະລັ່ງຈຳນວນຫລວງຫລາຍ ກໍ່ໄດ້ຮັບສານທວງເອົາສິດທີ່ມີລັກສະນະນີ້ຄືກັນ. ໃນເອກະສານທີ່ຕິດຄັດມານຳສານທວງເອົາສິດ ຍັງມີຈົດຫມາຍທີ່ມີເນື້ອໃນສັ້ນໆວ່າ "ຮຽນທ່ານ! ເນື່ອງໃນໂອກາດໄຊຊະນະຂອງປະເທດ ຜູ້ເປັນພັນທະມິດ ພວກຂ້າພະເຈົ້າຂໍອະນຸຍາດມອບສານທວງເອົາສິດຂອງປະຊາຊົນຫວຽດນາມ ແດ່ທ່ານ. ໂດຍເຊື່ອຫມັ້ນໃນກຽດອັນສູງສົ່ງຂອງທ່ານນັ້ນ, ພວກຂ້າພະເຈົ້າຫວັງວ່າ ທ່ານຈະສະຫນັບສະຫນູນຕໍ່ການທວງເອົາສິດນີ້ ໃນເວລາທີ່ບັນດາຜູ້ມີອຳນາດເຕັມທຳການອະພິປາຍສານທວງເອົາສິດດັ່ງກ່າວນັ້ນ.

ໃນນາມຂອງຊາວຫວຽດນາມຜູ້ຮັກຊາດ ຫງວຽນອາຍກວັກ".

ຫລາຍຄັ້ງທີ່ມີຄົນພົບເຫັນຊາຍຫນຸ່ມຫວຽດນາມຜູ້ພາກພຽນຄົນນີ້ ໂດຍມີ ຕັບເຈ້ຍຫນີບຢູ່ກ້ອງຂີ້ແຮ້ ຢືນຢູ່ໃນສຳນັກຂອງບັນນາທິການຫນັງສືພິມ ປາຣີ, ຊຶ່ງມີສຽງອຶກກະທຶກ, ມີຄວັນຢາມືດກຸ້ມລົບທົບ ຢູ່ຫ້ອງປະຊຸມອັນຄັບແຄບທີ່ບັນດາກຳມະບານ ແລະພັກສັງຄົມນິຍົມໄດ້ເຊົ່າເພື່ອຈັດຕັ້ງການປະຊຸມ ແລະ ການໂຮມຊຸມນຸມມິດຕິງຕ່າງໆ.

ລຸຍ ອາກູ ຫົວຫນ້າພະແນກອິນດູຈີນຂອງສຳນັກງານນັກສືບຝະລັ່ງ, ເຊິ່ງ ໃນອະນາຄົດຈະເປັນຫົວຫນ້າຂອງສຳນັກງານນັກສືບທີ່ຂຶ້ນກັບຂ້າຫລວງໃຫຍ່ຂອງຝະລັ່ງ ປະຈຳອິນດູຈີນ, ຍົກບ່າໄຫລ່ເມື່ອໄດ້ຟັງລາຍງານກ່ຽວກັບການກະທຳຂອງບຸກຄົນຫນຶ່ງ ທີ່ມີຊື່ວ່າ ຫງວຽນອາຍຫວັກ ແລະ ກ່ຽວກັບເນື້ອໃນຂອງ "ເອກະສານຕ້ານຝະລັ່ງ" ຊຶ່ງຜູ້ກ່ຽວແຈກຢາຍໄປທົ່ວທຸກບ່ອນ. ອີງຕາມຫນ້າທີ່ຂອງເຂົານັ້ນ ອາກູ ຈະຕ້ອງຮູ້ຄົນອານາມທຸກຄົນທີ່ຕ້ອງສົງໄສ ຊຶ່ງດຳລົງຊີວິດຢູ່ປາຣີ, ສະນັ້ນເຂົາຈຶ່ງຮູ້ດີກ່ຽວກັບການເຄື່ອນ

ໄຫວທຸກໆຢ່າງຂອງ "ຜູ້ກໍ່ກວນຄວາມສະຫງົບ" ທີ່ມາຈາກອິນດູຈີນ. ໜຶ່ງໃນຈຳນວນຄົນປະເພດນີ້ ຟາມວູຈິງ ຊຶ່ງເປັນເຈົ້າຂອງຮ້ານຖ່າຍຮູບ ແຕ່ໃນຕົວຈິງເພິ່ນໄດ້ເຫີນຫ່າງຈາກການເຄື່ອນໄຫວດ້ານການເມືອງແລ້ວ, ອີກປະການໜຶ່ງ ການກະທຳ ອັນກ້າຫານຄືແນວນີ້ ອັນທີ່ຈິງແລ້ວ ມັນບໍ່ຖືກກັບທັດສະນະຂອງ ຟາມວູຈິງ ເລີຍ, ຍ້ອນວ່າຍາມໃດເພິ່ນກໍມີທ່າທີເຄົາລົບນັບຖືປະເທດຝະລັ່ງ. ສ່ວນອີກຄົນໜຶ່ງ ຄືທະນາຍຄວາມ ຟາມວັນເຈື່ອງ ເຊິ່ງອາໄສຢູ່ ປາຣີຄືກັນ ຖືກຈັດວ່າເປັນນັກມາກຊິດ, ແຕ່ໃນຕົວຈິງ ເພິ່ນມີແຕ່ແປປຶ້ມການເມືອງມາເປັນພາສາຫວຽດ ແລະ ບໍ່ເຄີຍເຂົ້າຮ່ວມໃນວຽກງານຄືແນວນີ້ຈັກເທື່ອ. ໃນຈຳນວນບຸກຄົນສຳຄັນທີ່ກ້າປະຕິບັດວຽກງານຄືແນວນີ້ ມີແຕ່ ຟານໂບ້ຍ - ເຈົາ ຜູ້ເກັ່ງກ້າເທົ່ານັ້ນ. ແຕ່ ອາກນູ ກໍຮູ້ຢ່າງແນ່ນອນວ່າ ຂະນະນີ້ ຟານໂບ້ຍເຈົາຢູ່ບ່ອນໃດບ່ອນໜຶ່ງທີ່ພາກໃຕ້ຂອງຈີນ, ຍິ່ງກວ່ານັ້ນ ມໍ່ໆນີ້ ເພິ່ນໄດ້ຂໍລົງບົດຄວາມໜຶ່ງທີ່ມີລັກສະນະປະນີປະນອມທີ່ສຸດ, ໃນບົດຄວາມນີ້ ເພິ່ນອອກຄວາມເຫັນ ສະໜັບສະໜູນນະໂຍບາຍຮ່ວມມືຝະລັ່ງ-ຫວຽດ ຢ່າງບໍ່ມີໃຜຄາດຄິດມາກ່ອນ.

ທັງ ອາກນູ "ຜູ້ມີສາຍຕາສອດສ່ອງຢູ່ທົ່ວທຸກແຫ່ງ" ທັງເພື່ອນຝູງໃກ້ຊິດຂອງຄົນຮັກຊາດຜູ້ໜຸ່ມນ້ອຍທີ່ກ້າເປັ່ງສຽງເອົ້າ ເພື່ອປົກປ້ອງເອົາປະຊາຊົນທີ່ຖືກກົດຂີ່ ຢູ່ກະໂຕກາງໜາກຫົວໃຈຂອງຈັກກະພັດຝະລັ່ງຊຶ່ງບໍ່ຮູ້ ແລະ ບໍ່ສາມາດຮູ້ໃນຊ່ວງເວລາດັ່ງກ່າວວ່າ ຫງວຽນອາຍກວັກ ຊຶ່ງເປັນເຈົ້າຂອງບົດຂຽນ "ສານທວງເອົາສິດ", ວັນບາ ຜູ້ຊ່ວຍອ້າຍລ້ຽງຢູ່ເທິງກຳປັ່ນເດີນທະເລ, ລູກຊາຍຄົນດຽວຂອງມະຫາບັນດິດຈາກ ບ້ານດອກບົວ, ຫງວຽນເຕີດແທ່ງ ຫລານນ້ອຍຜູ້ສອດຮູ້ສອດເຫັນນັ້ນ ໃນຕົວຈິງແລ້ວແມ່ນບຸກຄົນດຽວກັນ.

ຕອນເຊົ້າຂອງວັນທີ ໘໙ ເດືອນມິຖຸນາ ປີ ໑໙໑໙, ແທ່ງ ເປັນໜຶ່ງໃນບັນດາລູກຄ້າຜູ້ທຳອິດຂອງຮ້ານຂາຍໜັງສືພິມ. ໃນໜ້າທຳອິດ ຂອງໜັງສືພິມສະບັບຕ່າງໆລ້ວນແຕ່ພາດຫົວຂໍ້ໃຫຍ່ສວຍງາມ. ໜັງສືພິມຂອງພວກນາຍທຶນຕ່າງກໍຊື່ນຊົມຍິນດີ. ກອງປະຊຸມຢູ່ທີ່ປາຣີ ສຳເລັດລົງດ້ວຍການເຊັນສັນຍາສັນຕິພາບ ຊຶ່ງໝາຍເຖິງໄຊຊະນະອັນສົມບູນຂອງປະເທດຝະລັ່ງ. ໃນຕົວຈິງແລ້ວ ເຍຍລະມັນ ເປັນຜູ້ຕອບສະໜອງ ຕາມການເລັ່ງທວງຂອງຝະລັ່ງຢ່າງເຕັມປ່ຽມ:ມອບເຂດອານຊາດ ແລະ ລໍແຣນ, ເງິນທຶດ

ແທນຄ່າເສຍຫາຍຈາກສົງຄາມ ແລະ ສ່ວນໜຶ່ງຂອງເມືອງຂຶ້ນຂອງ ເຢຍລະມັນ ຢູ່ທະວີບອາຟະລິກາໃຫ້ແກ່ຝະລັ່ງ. ໜັງສືພິມໄດ້ເວົ້າຫລາຍກ່ຽວກັບການປັບປຸງໂຄງປະກອບຂອງທະວີບເອີລົບຂອງພວກນາຍທຶນ ພາຍຫລັງສົງຄາມ, ຢູ່ແຫ່ງນີ້ຝະລັ່ງ ມີບົດບາດອັນດັບໜຶ່ງ. ສ່ວນບັນຫາທີ່ເຮັດໃຫ້ຫງວຽນ ເປັນຫ່ວງຫລາຍທີ່ສຸດນັ້ນຄື ບັນຫາ ກ່ຽວກັບໂຊກຊາຕາຂອງປະຊາຊາດເມືອງຂຶ້ນ ແມ່ນບັນຫາດຽວທີ່ບັນດາໜັງສືພິມ ຕ່າງກໍບໍ່ເວົ້າເຖິງເລີຍ. ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມປາຣີ ລ້ວນແຕ່ມີຄວາມມຸ່ງຫວັງ ຢາກແບ່ງໂລກຄືນໃໝ່ເພື່ອເປັນຜົນປະໂຫຍດໃຫ້ແກ່ບັນດາປະເທດທີ່ຊະນະສົງຄາມເທົ່ານັ້ນ,ຈາກນັ້ນ ກອງປະຊຸມພັດບໍ່ເອົາຫົວຊານຳຂໍ້ຮຽກຮ້ອງອັນຖືກຕ້ອງເປັນທຳ ຂອງບັນດາຜູ້ຕາງໜ້າຈຳນວນຫລວງຫລາຍຂອງປະເທດເມືອງຂຶ້ນ ແລະ ປະເທດທີ່ບໍ່ມີເອກະລາດ. ບໍ່ມີຄຳຕອບໃດໆຕໍ່ "ສານທວງເອົາສິດຂອງປະຊາຊົນຫວຽດນາມ" ນັ້ນເລີຍ.

ເປັນທີ່ແນ່ນອນແລ້ວ, ມາຮອດເວລານັ້ນ ຫງວຽນມີບົດຮຽນພໍສົມຄວນພໍຈະເຂົ້າໃຈວ່າ ການຍື່ນສານທວງເອົາສິດຕໍ່ພວກຈັກກະພັດ ເປັນການຍາກທີ່ສຸດທີ່ຈະໄດ້ຮັບ ຜົນສຳເລັດ. ຫງວຽນ ຖືວ່າການລິເລີ່ມຂອງເພິ່ນເປັນໂອກາດເໝາະສົມເພື່ອເຜີຍແບລັດທິລ່າເມືອງຂຶ້ນອີກເທື່ອໜຶ່ງ, ດຶງດູດຄວາມສົນໃຈຂອງຝ່າຍປະຊາທິປະໄຕຝະລັ່ງ ຕໍ່ສະຖານະການຫວຽດນາມ ແລະ ປຸກຊາວຫວຽດນາມໃຫ້ຕື່ນຈາກ ຄວາມຫລັບໃຫລເປັນເວລາດົນນານ.

ເຖິງຢ່າງໃດກໍຕາມ, ເພິ່ນຍັງມີຄວາມຮູ້ສຶກຈັບແສບ. ວັນນັ້ນ ຫງວຽນຄິດຕຶກຕອງຫລາຍສິ່ງຫລາຍຢ່າງເປັນເວລາເຫິງນານ. ອິດສະຫລະພາບ ສະເໝີພາບ ພະລາດອນພາບ ຄວາມເວົ້າຈົບງາມເຫລົ່ານັ້ນ ໃນຕົວຈິງແລ້ວ ມັນເປັນພຽງແຕ່ມ່ານຄວັນເພື່ອໃຫ້ຊົນຊັ້ນນາຍທຶນປິດບັງບັນດາໂທດກຳຂອງພວກເຂົາທີ່ຕ້ານປະຊາຊາດ. ແປດຂໍ້ທີ່ໄດ້ຍົກຂຶ້ນໃນ "ສານທວງເອົາສິດ" ບໍ່ໄດ້ຮຽກຮ້ອງຫຍັງອີກ ນອກຈາກສະເໜີໃຫ້ມອບສິດປົກຄອງຕົນເອງໃຫ້ແກ່ຫວຽດນາມ ໃນຂອບເຂດສະຫະພັນຝະລັ່ງ ແລະ ໃຫ້ປະຕິບັດສິດເສລີພາບຂັ້ນພື້ນຖານຂອງປະຊາທິປະໄຕນາຍທຶນໃຫ້ປະກົດເປັນຈິງເທົ່ານັ້ນ.ແຕ່ສານທວງແປດຂໍ້ເຫລົ່ານັ້ນເປັນສິ່ງທີ່ສ້າງຄວາມໂມໂຫໃຫ້ແກ່ພວກລ່າເມືອງຂຶ້ນຫລາຍທີ່ສຸດ . ບັນດາຖະແຫລງການແບບເສລີນິຍົມອັນສວຍສົດງົດງາມທີ່ພວກຈັກກະພັດຫວ່ານອອກຢ່າງກວ້າງຂວາງຢູ່ໃນຊຸມປີແຫ່ງສົງຄາມນັ້ນ ແມ່ນເພື່ອຊອກຫາເຫຍື່ອມາເປັນເປົ້າບັງກະສູນໃຫ້ພວກເຂົາ ແລະ ໃນຄວາມເປັນຈິງ ແມ່ນລະຄອນຫລອກລວງ. ບໍ່ທ່ອນຮ້ອງຂໍຄວາມ

ເປັນທຳຈາກພວກຈັກກະພັດໄດ້ຈັກເທື່ອ. ດັ່ງນັ້ນ ທາງອອກຢູ່ໃສ ? ຈະມີແຕ່ຕໍ່ສູ້ ຈົນຝ່າຍຫນຶ່ງດັບສູນ, ຝ່າຍຫນຶ່ງຍັງ. ເພື່ອປົດປ່ອຍຕົນເອງ, ບັນດາປະຊາຊາດເມືອງຂຶ້ນຕ້ອງໂຄ່ນລົ້ມແອກຄອບຄອງຂອງພວກກົດຂີ່ ເຊັ່ນດຽວກັນກັບຊາວຜູ້ອອກແຮງງານ ລັດເຊຍ ທີ່ໄດ້ເຮັດມາແລ້ວ. ການປະຕິວັດ ແມ່ນສິ່ງທີ່ໃຊ້ບຸກທະລຸກຳແພງລ່າເມືອງຂຶ້ນຊຶ່ງເບິ່ງຄືວ່າບໍ່ມີໃຜທຳລາຍລົງໄດ້.

"ສານທວງເອົາສິດ" ໄດ້ກາຍເປັນຖະແຫລງການການເມືອງ ທີ່ປ່າວປະກາດຍຸກໃຫມ່ ແຫ່ງການຂະຫຍາຍ ຂະບວນການປົດປ່ອຍຊາດ ຂອງຫວຽດນາມ. ສະຫາຍບຸ່ຍເລິມ ສະມາຊິກຜູ້ອາວຸໂສ ຂອງພັກກອມມູນິດຫວຽດນາມ ໄດ້ທວນຄືນວ່າ ພຶດຕິກຳຂອງຫງວຽນອາຍກວັກ ກໍ່ໃຫ້ເກີດປະຕິກິລິຍາເຖິງຂັ້ນໃດໃນຫມູ່ຊາວອິນດູຈີນ ຕ່າງດ້າວ, ໃນຫມູ່ພົນທະຫານ, ທະຫານເຮືອໃນກອງທັບຝະລັ່ງ: "ຄົນຝະລັ່ງເອີ້ນສານດັ່ງກ່າວວ່າແມ່ນ "ລູກລະເບີດ", ສ່ວນຄົນຫວຽດນາມຖືວ່າແມ່ນສຽງຟ້າຮ້ອງລະດູ ບານໃຫມ່, ແມ່ນສຽງຟ້າຮ້ອງທີ່ໄດ້ປັດກວາດໂງ່ນຫມອກມືດທີ່ປິດລ້ອມພວກຂ້ອຍຈົນກ້ຽງເມື່ອຫນີຈາກປະເທດຊາດໄປຫາລ້ຽງຊີບຢູ່ຕ່າງປະເທດ, ຄວາມຈິງແລ້ວ ພວກເຮົາຄົນຊາດດຽວກັນກໍຍັງຄົງຮັກຊາດຢູ່ ແລະມີຄວາມໄຝ່ຝັນຢາກໃຫ້ປະເທດຊາດມີອິດສະຫລະພາບ. ມາບັດນີ້ ຢູ່ກະໂຕນະຄອນຫລວງປະເທດຝະລັ່ງ ຢູ່ໃນກອງປະຊຸມຂອງປະເທດມະຫາອຳນາດນັ້ນມີຄົນຫວຽດນາມຜູ້ຫນຶ່ງໄດ້ປະກົດຕົວຂຶ້ນຢ່າງບໍ່ມີໃຜຄາດຄິດມາກ່ອນ ຄົນຫວຽດ-ນາມຜູ້ນັ້ນທວງເອົາສິດຜົນປະໂຫຍດອັນຊອບທຳມາໃຫ້ແກ່ຊາດຕົນ, ການກະທຳດັ່ງກ່າວໄດ້ເຮັດໃຫ້ທາງສຽງໂລກປັ່ນປ່ວນໂຈດຂານກັນ, ເມື່ອເປັນດັ່ງນັ້ນ ຜູ້ໃດກໍ່ຕ້ອງ ນັບຖືແລະ ກົ້ມຫົວໃຫ້ຄົນຜູ້ນີ້. ເມື່ອເວລາເພື່ອນຮ່ວມຊາດຫວຽດນາມ ທີ່ອາໃສຢູ່ ຝະລັ່ງພົບພໍ້ກັນເຮົາເຈົ້າລ້ວນແຕ່ເວົ້າເຖິງເອກະລາດ, ສິດໃນການຕັດສິນຊາຕາກຳ ດ້ວຍຕົນເອງ, ແລະ ຫງວຽນອາຍກວັກ. ກະໂຕຊື່ ຫງວຽນ ຜູ້ຮັກຊາດເອງ ກໍມີພະລັງ ແຮງດຶງດູດອັນມະຫັດສະຈັນ".

ຊື່ຂອງຄົນຜູ້ໃຫມ່ທີ່ປະກົດຕົວຂຶ້ນຢູ່ໃນຂະບວນການຕໍ່ຕ້ານການລ່າເມືອງຂຶ້ນ ແລະການທີ່ ຫງວຽນ ບາກບັ່ນເຜີຍແຜ່ "ເອກະສານຕ່າງໆທີ່ເປັນໄພ" ໄດ້ສ້າງຄວາມວຸ້ນ-ວາຍໃຫ້ແກ່ພວກປົກຄອງລ່າເມືອງຂຶ້ນຝະລັ່ງຢູ່ອິນດູຈີນຢ່າງໃຫຍ່. ວັນທີ ໒໕ ເດືອນ ກໍລະກົດ ປີ ໑໙໑໙ ກະຊວງອານານິຄົມຝະລັ່ງຢູ່ ປາຣີ ໄດ້ຮັບເອກະສານລັບຂອງ ຂ້າຫລວງນາມກີ່ (ພາກໃຕ້ຫວຽດນາມ) ຂຽນວ່າ "ມີຄົນສົ່ງໃບປິວປຸກລະດົມຈາກ ປາ

ຣີ ໄປໃຫ້ບັນດາໜັງສືພິມຢູ່ປະເທດເມືອງຂຶ້ນ. ໃນໃບປິວໄດ້ພາດຫົວຂໍ້ "ຂໍເລັ່ງທວງ
ຂອງປະຊາຊົນອານນາມ" ແລະ ໄດ້ເຊັນຊື່ "ຕາງໜ້າໃຫ້ກຸ່ມຊາວຫວຽດນາມ ຜູ້ຮັກ
ຊາດ-ຫງວຽນອາຍກວັກ". ຂ້າພະເຈົ້າຈະຂອບໃຈຢ່າງສູງ ຖ້າວ່າທ່ານຈະໂທລະເລກ
ດ່ວນມາຫາຂ້າພະເຈົ້າໃນໄວໆນີ້ ໂດຍແຈ້ງໃຫ້ຮູ້ໂດຍດ່ວນກ່ຽວກັບຜູ້ຂຽນໃບປິວທີ່ເວົ້າຢູ່
ຂ້າງເທິງນີ້. ນອກຈາກນີ້ ຍັງມີຈົດໝາຍທີ່ແຈ້ງໃຫ້ຮູ້ວ່າ ຄົນຜູ້ນີ້ໄດ້ແຈກຢາຍໃບປິວໃຫ້
ບຸກຄົນສຳຄັນຈຳນວນຫລວງຫລາຍ ຢູ່ຕາມປະເທດແມ່. ອີງຕາມຂໍ້ມູນ ຂອງສຳນັກງານ
ນັກສືບຂອງ ນາມກີ ນັ້ນໃຫ້ຮູ້ວ່າ ກະຊວງອານານິຄົມ ໄດ້ຮູ້ກ່ຽວກັບຄົນຜູ້ນີ້ແລ້ວ".

ຜູ້ສຳເລັດລາຊະການປະຈຳອິນດູຈີນ ໄດ້ສົ່ງໂທລະເລກທີ່ມີເນື້ອໃນຄ້າຍຄືກັນ ນີ້
ໄປຝະລັ່ງວ່າ: "ຂ້າພະເຈົ້າຂໍລາຍງານຕໍ່ທ່ານວ່າ ໄດ້ມີຄົນບັກກີ່ (ພາກເໜືອ ຫວຽດ
ນາມ) ຜູ້ໜຶ່ງທີ່ຖືກຈັບແລ້ວ, ໃນຕົວຂອງເຂົາມີໃບປິວ "ສິດຂອງບັນດາປະຊາຊາດ"
ຂອງຫງວຽນອາຍກວັກ ທີ່ລົງໃນໜັງສືພິມ "ຊຸຍມານິເຕ". ຄົນບັກກີ່ຜູ້ນີ້ ໄດ້ສາລະ -
ພາບວ່າ ໃບປິວດັ່ງກ່າວໄດ້ແຈກຢາຍໃຫ້ແກ່ຄົນຕ່າງດ້າວ ໕໐ ຄົນ ທີ່ກັບຄືນ ປະເທດ
ຫວຽດນາມ ຢູ່ທ່າເຮືອ ມາກໄຊ ກ່ອນທີ່ກຳປັ່ນຈະດຶງສະໝໍຂຶ້ນ".

ໜັງສືພິມຂອງພວກລ່າເມືອງຂຶ້ນຢູ່ຫວຽດນາມ ມີປະຕິກິລິຍາຕໍ່ເຫດການນີ້ ຕາມ
ແບບຂອງພວກເຂົາ. ໜັງສືພິມ "ບັກກີ່ ໃນອະນາຄົດ" ຂຽນວ່າ: ຊໍ້າພັດ ຍັງແມ່ນ
ຫງວຽນອາຍກວັກ ຕາມເຄີຍ! ຫວ່າງມໍ່ໆມານີ້ ພວກຂ້າພະເຈົ້າໄດ້ຄັດເອົາ ບາງຕອນ
ຂອງສານທວງເອົາສິດທີ່ຂຽນໄວ້ຢູ່ ປາຣີ ຊຶ່ງເຊັນຊື່ຂອງ ຫງວຽນອາຍກວັກນັ້ນ ລົງໃນ
ໜັງສືພິມ. ກະທັ້ງໃນຖ້ຽວເດີນກຳປັ່ນມໍ່ໆນີ້ ຍັງໄດ້ນຳເອົາສານທວງເອົາສິດ ດັ່ງກ່າວ
ມາໃຫ້ພວກຂ້າພະເຈົ້າ ໃຕ້ຫົວຂໍ້ທີ່ວ່າ "ສິດຂອງບັນດາປະຊາຊາດ". ສານທວງ ເອົາ
ສິດດັ່ງກ່າວ ໄດ້ຕົກມາຮອດມືບັນດານັກໜັງສືພິມ, ຂ້າລາຊະການຂອງສຳນັກງານຕ່າງໆ
ເຊັ່ນດຽວກັນ".

ພາຍຫລັງການປະກົດຕົວຂອງ "ສານທວງເອົາສິດ" ເຖິງວ່າເວລານັ້ນສົງຄາມ
ໄດ້ສິ້ນສຸດແລ້ວ ກະຊວງອານານິຄົມຝະລັ່ງກໍ່ຍັງອອກຄຳສັ່ງໃຫ້ທຳການກວດຈົດໝາຍທຸກ
ສະບັບຢູ່ຫວຽດນາມ ເຊັ່ນດຽວກັນກັບຈົດໝາຍຂອງຄົນຫວຽດນາມທີ່ຝາກມາແຕ່ຝະລັ່ງ.
ກົມຕຳຫລວດ ຢູ່ຝະລັ່ງ ແລະ ຢູ່ອິນດູຈີນ ລົງມືກຽມ ສຳນວນເອກະສານ ກ່ຽວກັບ
ຫງວຽນອາຍກວັກ, ໂດຍໄດ້ມອບໜ້າທີ່ ໃຫ້ນັກສືບສອງຄົນຕິດຕາມເພິ່ນ ເປັນປະ
ຈຳ. ຫ້ອງການເກັບສຳເນົາ ຂອງສຳນັກງານນັກສືບຝະລັ່ງຢູ່ ປາຣີ ມີຮູບຖ່າຍແຜ່ນທຳ

ອີກຂອງ ຫວງວຽນອາຍກວັກ ໂດຍແມ່ນນັກສືບລັກຖ່າຍໃນທ້າຍປີ ໑໙໑໙. ບົດລາຍງານສະບັບໜຶ່ງຂອງກະຊວງພາຍໃນຝະລັ່ງ ໄດ້ຊີ້ໃຫ້ເຫັນວ່າ: "ການສືບຫາຂະບວນການໂຄສະນາຕ້ານລັດຖະບານໃນໝູ່ຊາວອານນາມຢູ່ ປາຣີ ເພື່ອສະໜັບສະໜູນ "ຂໍ້ຮຽກຮ້ອງຂອງປະຊາຊົນອານນາມ" ພິສະຫລູບໄດ້ວ່າ ປະຈຸບັນ ຜູ້ປຸກລະດົມກຳລັງໃຈ ຂອງຂະບວນການດັ່ງກ່າວໂຕຈິງແລ້ວແມ່ນ ຫວງວຽນອາຍກວັກ, ເລຂາທິການໃຫຍ່ ຂອງສະມາຄົມຊາວຫວຽດນາມຜູ້ຮັກຊາດ".

ພາຍຫລັງທີ່ ລຸຍ ອາກນູ ເຫັນຮູບຖ່າຍຫວງວຽນອາຍກວັກ ເປັນເທື່ອທຳອິດເຫັນໃບໜ້າທີ່ສະແດງຄວາມເດັດດ່ຽວ, ດວງຕາທັງຄູ່ເປັນປະກາຍ, ໃນເວລາສົນທະນາກັບເພື່ອນຮ່ວມງານຢູ່ກະຊວງອານານິຄົມ ເຂົາໄດ້ພະຍາກອນວ່າ:

"ຂໍໃຫ້ພວກທ່ານ ຈົ່ງເຊື່ອເຫາະວ່າ ຊາຍໜຸ່ມຜູ້ນີ້ ເຖິງແມ່ນວ່າມີຮູບຮ່າງຈ່ອຍແຕ່ຊ້ຳພັດເຕັມໄປດ້ວຍກຳລັງວັງຊາ ຄົນນີ້ນີ້ແຫລະ ອາດຈະເປັນຜູ້ໂຄ່ນລົ້ມ ການຄອບຄອງຂອງພວກເຮົາຢູ່ອິນດູຈີນ".

ຫວງວຽນອາຍກວັກຢາກເລົ່າສູ່ຄົນຝະລັ່ງທຳມະດາສາມັນຟັງແຕ່ດົນແລ້ວເຖິງຄວາມຈິງອັນໂຫດຮ້າຍກ່ຽວກັບການກະທຳທີ່ເຕັມໄປດ້ວຍໂຫດກຳ ຊຶ່ງພວກລ່າເມືອງຂຶ້ນກຳລັງສ້າງຂຶ້ນຢູ່ອິນດູຈີນ. ການໄດ້ຮູ້ຈັກກັບນັກໜັງສືພິມກ້າວໜ້າຂອງຝະລັ່ງເຊັ່ນ ກາສຕົງ-ມົງມູນໂຊ ບັນນາທິການ ວາລະສານກຳມະກອນ "ລາ ວີ ອູວະຣີແຢ" , ແລະ ຊັງລົງເກ ຫລານຂອງກາກ ມາກ ບັນນາທິການໜັງສືພິມ "ປະຊາຊົນ" ທີ່ເປັນ ກະບອກສຽງຂອງນັກສັງຄົມນິຍົມຝະລັ່ງ ເປັນສິ່ງທີ່ຊ່ວຍໃຫ້ຄວາມມຸ່ງໝາດປາຖະໜາ ຂອງຫວງວຽນອາຍກວັກ ປະກົດເປັນຈິງແລ້ວ.

ທັງ ມົງມູນໂຊ ແລະ ລົງເກ ໄດ້ແນະນຳໃຫ້ເພິ່ນຂຽນຂ່າວສັ້ນ ຊຶ່ງເວົ້າ ກ່ຽວກັບເຫດການທີ່ພວມເກີດຂຶ້ນຢູ່ຕາມບັນດາປະເທດເມືອງຂຶ້ນຝະລັ່ງນັ້ນມາລົງໜັງສືພິມ . ການຂຽນເປັນພາສາຕ່າງປະເທດ ມີຄວາມຫຍຸ້ງຍາກຫລາຍທີ່ສຸດ, ແຕ່ໂດຍອາໄສການຊ່ວຍເຫລືອຈາກເພື່ອນໃໝ່ສອງຄົນນີ້ ຊຶ່ງອິດທົນກວດແກ້ບົດໃຫ້ແທ້ງ ດັ່ງນັ້ນ ເພິ່ນຈຶ່ງຂຽນໄດ້ດີຂຶ້ນເທື່ອລະກ້າວ. ເພິ່ນຂຽນກ່ຽວກັບເລື່ອງທີ່ວ່າ ຄົນຝະລັ່ງໄດ້ຫລີ້ງລືມ ຢ່າງໄວວາຕໍ່ຊາວຫວຽດນາມເປັນສິບໆພັນຄົນ ຊຶ່ງໄດ້ຕໍ່ສູ້ໃຕ້ທຸງສາມສີຂອງປະເທດຝະລັ່ງ

ໃນຊຸມປີແຫ່ງສົງຄາມ ແລະ ໄດ້ເສຍຊີວິດ ບົນດິນແດນປະເທດຝະລັ່ງ, ເຍຍລະມັນ,ຢູ່ໃນເຂດພູບານກັງ. ເພິ່ນຍັງໄດ້ຂຽນກ່ຽວກັບຊາວ "ອາສາສະໝັກ" ຫວຽດນາມ ທີ່ເຮັດວຽກໃນເງື່ອນໄຂທຸກຍາກລຳບາກຄືແນວໃດຢູ່ໃນກິດຈະການກໍ່ສ້າງຖະໜົນຫົນທາງ ແລະ ຂຸດດິນປ້ານຄູຢູ່ເຂດອ້ອມແອ້ມພາກເໜືອປາຣີ, ບ່ອນທີ່ຫວຽນ ໄດ້ມາຢ້ຽມຢາມເປັນປະຈຳ. ເພິ່ນຍັງໄດ້ຂຽນກ່ຽວກັບເລື່ອງທີ່ວ່າ ເຖິງແມ່ນວ່າສົງຄາມໄດ້ສິ້ນສຸດ ລົງແລ້ວ ແລະ ຝະລັ່ງເປັນປະເທດທີ່ຊະນະສົງຄາມກໍ່ຕາມ, ແຕ່ວ່າສິ່ງດັ່ງກ່າວບໍ່ໄດ້ ເຮັດໃຫ້ສະພາບຂອງປະຊາຊົນຫວຽດນາມດີຂຶ້ນແຕ່ຢ່າງໃດ. ກົງກັນຂ້າມ ຍິ່ງນັບວັນຍິ່ງມີຄົນຫວຽດນາມຈຳນວນຫລາຍຖືກພວກລ່າເມືອງຂຶ້ນຝະລັ່ງຕັດສິນລົງໂທດ ໄປຂັງຄຸກຢູ່ປູໂລ-ໂກນດ້າວ ແລະ ຄຸກຂອງ ເຊິນລາ ແຂວງຢູ່ຫ່າງໄກສອກຫລີກຂອງນາມກີ່ ເພື່ອໃຫ້ຕາຍຢ່າງທໍລະມານຢູ່ໃນຄຸກນາລົກ ໂດຍມີຄາໜີບໍ ຫລືບໍ່ ກໍ່ຖືກສົ່ງໄປເຮັດວຽກສັບພະທຸກຢູ່ປະເທດ ກຸຍຢານ ແລະ ການເລໂດນີໃໝ່ ທີ່ຂຶ້ນກັບຝະລັ່ງ.

ໃນຄາວຮ່ວມມືກັບໜັງສືພິມຕ່າງໆ ຫວຽນອາຍກວັກ ຕັ້ງໃຈເກັບກຳຂ່າວ ບໍ່ຄ່ອຍມີປານໃດ ແຕ່ຊ້ຳພັດເປັນຂ່າວທີ່ບໍ່ກົງກັນກ່ຽວກັບເຫດການທີ່ເກີດຂຶ້ນຢູ່ປະເທດ ລັດເຊຍໂຊວຽດ, ເພິ່ນສໍ້ຖາມໝູ່ເພື່ອນໃນພັກສັງຄົມນິຍົມຝະລັ່ງ ເພື່ອຢາກຮູ້ ຫລາຍເທົ່າໃດຍິ່ງດີ ກ່ຽວກັບການປະຕິວັດລັດເຊຍ, ເພື່ອຢາກເຂົ້າໃຈວ່າ ຊ່າວໂບນເຊວິກ ແລະ ເລນິນ ຜູ້ນຳພວກເຂົາເຈົ້າແມ່ນໃຜ. ຢູ່ປະເທດຝະລັ່ງໃນຊ່ວງເວລານີ້,ເຮັດໄດ້ຄືແນວນີ້ ມັນບໍ່ແມ່ນເລື່ອງງ່າຍເລີຍ. ກົງຈັກໂຄສະນາຂອງນາຍທຶນໄດ້ເປີດບັ້ນຮົບ ໃສ່ຮ້າຍປ້າຍສີຢ່າງປ່ວງປ້າ ຕ້ານກັບລັດເຊຍໂຊວຽດ ໂດຍພະຍາຍາມບິດເບືອນ ເນື້ອແທ້ຂອງບັນດາເຫດການ ທີ່ກຳລັງເກີດຂຶ້ນຢູ່ແຫ່ງນັ້ນ. ຢູ່ຕາມຝາອາຄານທີ່ ປາຣີ ມີການແຂວນປ້າຍໂຄສະນາຕ່າງໆທີ່ມີເນື້ອໃນໃສ່ຮ້າຍປ້າຍສີ ແລະ ສາບແຊ່ງປ້ອຍດ່າ.ຢູ່ເທິງແຜ່ນປ້າຍດັ່ງກ່າວ ຊາວໂບນເຊວິກ ຖືກວາດພາບເປັນຄືພວກຜີມານ, ປາກຄາບ ມີດຕິດເລືອດ, ມືກຳພົມແມ່ຍິງ ແລະ ຢູ່ທາງຫລັງມີຮູບເຮືອນຂອງຊາວນາທີ່ກຳລັງ ຖືກໄຟໄໝ້. ຢູ່ຕາມປ້າຍອື່ນໆແມ່ນຮູບປະເທດລັດເຊຍທີ່ທຸກຍາກອຶດຫິວ ແລະ ອ່ອນເພຍທີ່ກຳລັງດິ້ນຕາຍ. ຢູ່ໃນໜ້າໜັງສືພິມ ຂອງພວກນາຍທຶນ, ຫວຽນ ໄດ້ອ່ານເລື່ອງລາວທີ່ເສກສັນປັ້ນແຕ່ງຂຶ້ນວ່າ ຊາວໂບນເຊວິກ ໄດ້ຢຽບປະເທດຊາດຈົມລົງໃນກອງເລືອດ , ອຳນາດປົກຄອງໂຊວຽດໄດ້ໂອນ ກະທັ້ງແມ່ຍິງເປັນຂອງລັດ, ດັ່ງນັ້ນໃຜຢາກເອົາເມຍກໍ່ຕ້ອງໄດ້ຮັບອະນຸຍາດເສຍກ່ອນ.

ໃນທ້າຍປີ ໑໙໑໘, ລັດຖະບານ ຝະລັ່ງ ປ່ຽນຈາກການໂຄສະນາແບບເປັນສັດຕູ ມາເປັນການແຊກແຊງເຂົ້າສາທາລະນະລັດໂຊວຽດຜູ້ຫນຸ່ມນ້ອຍໂດຍກົງດ້ວຍ ກຳລັງອາວຸດ. ກອງເຮືອຮົບກອງທັບຝະລັ່ງ-ອັງກິດ ເຄື່ອນເຂົ້າທະເລດຳ ແລະ ທອດສະໝໍຢູ່ທ່າເຮືອ ເຊວາສໂຕໂປນ, ໂອແດດຊາ. ພວກເຂົາຍົກພົນຂຶ້ນຝັ່ງຢຶດເອົາ ເຄີກເຊີນ ນີໂກລາແອັບ ແລະ ບຸກຄືບໜ້າ ເລິກເຂົ້າໄປທາງເໜືອ.

ເພື່ອເປັນການປະທ້ວງຕໍ່ການແຊກແຊງດັ່ງກ່າວ ຊົນຊັ້ນກຳມະກອນຝະລັ່ງ ກໍໄດ້ຈັດຕັ້ງການເດີນຂະບວນຢ່າງຂະໜານໃຫຍ່ ເພື່ອສະໜັບສະໜູນສາທາລະນະລັດ ໂຊວຽດຜູ້ຫນຸ່ມນ້ອຍ. ຫວງວຽນອາຍກວັກ ໄດ້ເຫັນກັບຕາດ້ວຍຕົນເອງວ່າ ກຳມະກອນໂຮງງານກົນຈັກສອງພັນຄົນ ຊຶ່ງເປັນໂຮງງານໜຶ່ງທີ່ຕັ້ງຫ່າງຈາກເຮືອນຂອງເພິ່ນບໍ່ໄກປານໃດ ໄດ້ໂຮມຊຸມນຸມມິດຕິງເປັນສອງສາມມື້ ເພື່ອສະໜັບສະໜູນປະເທດລັດເຊຍ ໂຊວຽດ ໂດຍສົມທົບກັບຊາວກຳມະກອນສັງກັດພັກສັງຄົມນິຍົມ ຫວງວຽນ ໄດ້ຊ່ວຍແຈກຢາຍໃບປິວຂອງພັກສັງຄົມນິຍົມຝະລັ່ງ ຊຶ່ງມີເນື້ອໃນຮຽກຮ້ອງໄປຍັງຊາວຜູ້ອອກແຮງງານໃຫ້ຄັດຄ້ານຕໍ່ການແຊກແຊງປະເທດລັດເຊຍນັ້ນໃຫ້ແກ່ກຳມະກອນໃນເຂດທີ່ຕົນອາໄສ.

ມາກໄຊ ກາແຊັງ ແມ່ນຜູ້ທີ່ປະກອບສ່ວນອັນໃຫຍ່ຫລວງເຂົ້າໃນການຊຸກຍູ້ ຂະບວນການເພື່ອປົກປັກຮັກສາປະເທດລັດເຊຍປະຕິວັດຢ່າງແຂງແຮງ. ເພິ່ນໄດ້ປະນາມຢ່າງຮຸນແຮງພວກທີ່ "ໃສ່ຮ້າຍປ້າຍສີການປະຕິວັດລັດເຊຍ ໂດຍທີ່ບໍ່ຍອມເຂົ້າໃຈ ເຖິງລັກສະນະອັນແທ້ຈິງຂອງການປະຕິວັດດັ່ງກ່າວ". ເມື່ອກ່າວຄຳປາໄສຢູ່ສະພາແຫ່ງຊາດ ກາແຊງ ໄດ້ເຕືອນລັດຖະບານວ່າ: "ເຖິງແມ່ນວ່າ ບັນດາທ່ານ ມີທ່າທີແນວໃດກໍຕາມຕໍ່ການປະຕິວັດລັດເຊຍ, ແຕ່ບັນດາທ່ານຕ້ອງຖອນກອງທັບອອກຈາກແຫ່ງນັ້ນໂດຍດ່ວນ. ຖ້າບັນດາທ່ານ ບໍ່ຍອມເຮັດວຽກນີ້ແລ້ວ ທະຫານຝະລັ່ງ ກໍຈະເຊື່ອມຊຶມເອົາ ແນວຄິດຂອງລັດທິ ໂບນເຊວິກ, ແນວຄິດປະຕິວັດຢ່າງໄວ, ບາງທີພວກເຂົາເຈົ້າອາດເຊື່ອມ-ຊຶມແນວຄິດດັ່ງກ່າວມາແລ້ວ, ຖ້າເປັນດັ່ງນັ້ນ ເວລາກັບຄືນ ພວກເຂົາຈະເຄື່ອນໄຫວເຊັ່ນດຽວກັບພວກທະຫານເຢຍລະມັນ ທີ່ໄດ້ມາດິນແດນປະເທດລັດເຊຍໃນຊຸມປີຫລັງ ໆ ນີ້.

ທຸກກົນອຸບາຍທີ່ຫວັງຢາກໃຊ້ກຳລັງບີບຮັດເຈດຈຳນົງ ຂອງບັນດາປະຊາຊາດນັ້ນ ເດັດຂາດຈະໄດ້ຮັບໝາກຜົນຄືຈັ່ງຊັ້ນ. ບັນດາປະຊາຊາດຈະຮູ້ວ່າ ພາຫະນະ ດີທີ່ສຸດ ເພື່ອຕໍ່ສູ້ຕ້ານພວກທ່ານຄືນຄືຄວາມສາມັກຄີຂອງຄົນທີ່ຍອມອົດທົນ, ຍອມເສຍສະຫລະ".

ຄວາມເວົ້າຂອງ ກາແຊງ ແມ່ນຢຳ. ໃນເດືອນເມສາປີ ໑໙໑໙ ການເດີນຂະບວນປະຕິວັດຕ່າງໆໄດ້ລະເບີດຂຶ້ນໃນກົມກອງທະຫານຝະລັ່ງ ທີ່ຕັ້ງຢູ່ ໂອແດດຊາ ແລະ ຢູ່ເທິງກຳປັ່ນທີ່ທອດສະໝໍຢູ່ເຊວາສໂຕໂປນ ແລະ ໂອແດດຊາ. ທະຫານບົກແລະ ທະຫານເຮືອຝະລັ່ງ ແຮກສ່ຽວກັບກຳມະກອນລັດເຊຍ, ພ້ອມກັນຮ້ອງເພງສາກົນກຳມາຊີບ. ພວກເຂົາໂຮ້ຮ້ອງຄຳຂວັນຕ່າງໆ: "ຈົ່ງກັບຄືນຕູລົງເສຍ", "ຍຸຕິສົງຄາມຕ້ານປະເທດລັດເຊຍ". ຢູ່ເທິງເຮືອຮົບກໍ່ໄດ້ສ້າງຕັ້ງ ຄະນະກຳມະການປະຕິວັດຂອງທະຫານເຮືອ. ຫງວຽນ ກໍໄດ້ອ່ານພົບຂ່າວສັ້ນຢູ່ໃນໜັງສືພິມ ເຊິ່ງເຮັດໃຫ້ເພິ່ນກັງວົນໃຈເປັນພິເສດ. ຊາວອານເຊຣີ, ມາຣົກ, ຫວຽດນາມ ທີ່ສັງກັດຢູ່ໃນກອງພົນປະສົມອາຟະລິກາ ທີ່ຕັ້ງຢູ່ ໂອແດດຊາ ບໍ່ຍອມສູ້ຮົບກັນ ເພື່ອສິດຜົນປະໂຫຍດຂອງພວກນາຍທຶນຝະລັ່ງ ແລະ ປ່ຽນມາເປັນໃຈກັບກອງທັບແດງ.

ເວລານັ້ນ ຫງວຽນອາຍກວັກ ຍັງບໍ່ທັນຮູ້ວ່າ ຄົນທຳອິດທີ່ຊັກທຸງແດງຂຶ້ນ ຢູ່ເທິງເຮືອຮົບລາດຕະເວນ "ວານແດດ ຣູດໂຊ" ທີ່ຈອດຢູ່ທ່າເຮືອ ໂອແດດຊາ ເປັນຄົນຫວຽດນາມຄົນໜຶ່ງຊື່ ໂຕນດຶກທັງ, ແມ່ນຄົນຜູ້ໜຶ່ງທີ່ໄດ້ຮຽນຮ່ວມກັບຫງວຽນ ຢູ່ໂຮງຮຽນການຊ່າງໄຊ່ງ່ອນ ຊຶ່ງຕະຫລອດໄລຍະອັນຍາວນານໃນພາຍຫລັງມາໄດ້ເປັນເພື່ອນຮ່ວມຮົບທີ່ສະໜິດສະໜົມທີ່ສຸດຂອງເພິ່ນ ຢູ່ໃນການຕໍ່ສູ້ເພື່ອປະເທດຫວຽດນາມໃໝ່. ຕໍ່ມາ ສະຫາຍໂຕນດຶກທັງ ໄດ້ກ່າວວ່າ: ຂ້າພະເຈົ້າເຊື່ອໝັ້ນວ່າ ບໍ່ວ່າຄົນຫວຽດນາມຜູ້ຮັກຊາດຄົນໃດ, ໂດຍສະເພາະແມ່ນຊາວກຳມະກອນທີ່ມີໜ້າໃນວິນາທີຄັ້ງປະຫວັດສາດດັ່ງກ່າວຢູ່ເທິງທະເລດຳ ລ້ວນແຕ່ຕ້ອງກະທຳເຊັ່ນດຽວກັບຂ້າພະເຈົ້າ ຍ້ອນວ່າຮັກປະເທດຊາດ ແລະ ຄຽດແຄ້ນພວກຈັກກະພັດ, ກ່ອນອື່ນໝົດ ໝາຍຄວາມວ່າ ຕ້ອງຮັກແພງການປະຕິວັດເດືອນຕຸລາ ແລະ ຄຽດແຄ້ນບໍ່ວ່າສັດຕູໂຕໃດທີ່ຕ້ານການປະຕິວັດ ດັ່ງກ່າວ".

ອຳນາດການປົກຄອງຝະລັ່ງ ໄດ້ລົງໂທດຢ່າງສະຖານໜັກຕໍ່ບັນດາທະຫານເຮືອທີ່ລຸກຮືຂຶ້ນ. ທະຫານຊ່າງປະຈຳເຮືອພິຄາດ "ໂປຼເຕ" ຄື ອັງດະເຣ ມາກຕີ້ພ້ອມດ້ວຍບັນດາສະຫາຍຈຳນວນສິບໆຄົນຂອງລາວໄດ້ຖືກສົ່ງໄປເຮັດວຽກສັບພະທຸກ. ແຕ່ການປາບປາມດັ່ງກ່າວບໍ່ສາມາດກີດກັນການຕໍ່ສູ້ຂອງຊາວຜູ້ອອກແຮງງານຝະລັ່ງ ເພື່ອປົກປັກຮັກສາປະເທດລັດເຊຍໂຊວຽດ. ໃນຊຸມມື້ດັ່ງກ່າວນັ້ນ ບັນດານັກສັງຄົມນິຍົມຜູ້ໜຸ່ມນ້ອຍ ຢູ່ປາຣີ ໄດ້ພາກັນຮ້ອງເພງເດີນ ທີ່ອຸທິດໃຫ້ແກ່ບັນດາທະຫານເຮືອຜູ້ພິລະອາດຫານ ໂດຍ

ແມ່ນ ໂປນ ໄວຢັງ-ກູຕົວຣິເອ ເປັນຜູ້ແຕ່ງ.

ຊີວິດສ່ວນຕົວຂອງ ຫວູງຽນ ຄ່ອຍໆໄດ້ຮັບການແກ້ໄຂ. ດ້ວຍຄວາມຊ່ວຍເຫລືອ ຂອງບັນດາສະຫາຍໃນພັກທີ່ໄດ້ຊອກ "ບັດອະນຸຍາດພັກອາໄສ" ຊຶ່ງແມ່ນເອກະສານ ທີ່ ອະນຸຍາດໃຫ້ພັກອາໄສ ແລະ ເຮັດວຽກງານ. ເມື່ອໄດ້ຮັບຫນັງສືທາງການ ທີ່ເຈົ້າຫນ້າ ທີ່ຕຳຫລວດເປັນຜູ້ອອກໃຫ້ ຫວູງຽນກໍ່ຊອກບ່ອນເຮັດວຽກອັນຖາວອນໄດ້ຢ່າງໄວວາ ຢູ່ ຮ້ານຖ່າຍຮູບອ່າວໃຫຍ່ແດ່ແຫ່ງຫນຶ່ງ. ຄັນເວົ້າເຖິງບ່ອນຫລັບບ່ອນນອນເປັນບັນຫາຍາກ ສົມຄວນ. ນ້ອຍຫນັກນ້ອຍຫນາທີ່ເຈົ້າຂອງເຮືອນຈະໃຫ້ຄົນຫວຽດນາມເຊົ່າ. ໂດຍອາ ໄສ ໄວຢັງ-ກູຕົວຣິເອ ຈາກນັ້ນບໍ່ດົນເພິ່ນຈຶ່ງໄດ້ເຊົ່າເຮືອນຫນຶ່ງຫ້ອງແຄບໆຢູ່ຮ່ອມນ້ອຍ ກົງແປັງ, ຂຶ້ນກັບຄຸ້ມ ໑໗ ຂອງ ປາຣີ.

ມັນເປັນຫ້ອງແຄບໆ ຊຸ່ມ ແລະ ມືດ, ອາໄສແຕ່ປ່ອງຢ້ຽມປ່ອງດຽວ ຈຶ່ງແນມ ເຫັນຝາຂອງເຮືອນຢູ່ຂ້າງຄຽງ. ຖ້າຢາກເຫັນທ້ອງຟ້າສີຄາມ ກໍຕ້ອງໄດ້ຍືດຄໍຍາວປານ ຄໍນົກເຈົ່າ ຈຶ່ງຈະເຫັນໄດ້. ຢູ່ໃນຫ້ອງກໍບໍ່ມີເຕົາຝີງ ສະນັ້ນເມື່ອລະດູຫນາວມາຮອດ , ໂດຍສະເພາະໃນຕອນກາງຄືນ ຫວູງຽນ ເປັນທຸກຫລາຍຍ້ອນຄວາມຫນາວ. ແຕ່ເພິ່ນກໍ ຄິດຫາວິທີແກ້ຄວາມຫນາວໄດ້ງ່າຍທີ່ສຸດ: ຕອນເຊົ້າກ່ອນຈະອອກໄປເຮັດວຽກ ເພິ່ນເອົາ ດິນຈີ່ຫນຶ່ງກ້ອນໄປວາງໄວ້ຢູ່ໃນເຕົາຝີງຂອງເຈົ້າຂອງເຮືອນ, ຕອນເດິກມາ ເມື່ອເພິ່ນ ກັບມາເຮືອນ ເພິ່ນເອົາເຈ້ຍຫນັງສືພິມມາຫໍ່ກ້ອນດິນຈີ່ ແລ້ວວາງໄວ້ເທິງຕຽງ ສຳລັບ ຝີງພໍໃຫ້ແກ້ຫນາວໄດ້ຊົ່ວຄາວ.

ຕົ້ນຊຸມປີ ໒໐ ຮ່ອມນ້ອຍກົງແປັງ ເປັນຄຸ້ມບ້ານຫນຶ່ງທີ່ເປັນບ່ອນອາໄສຂອງພວກ ກຳມະກອນ ແລະ ພວກທຸກຈົນທີ່ສຸດ. ປະຈຸບັນນີ້, ເຂດນີ້ ໄດ້ຂະຫຍາຍອອກ ກ້ວາງ ຂວາງກວ່າແຕ່ກ່ອນ, ພວກນາຍທຶນໄດ້ມາຕັ້ງຖິ່ນຖານບ້ານຊ່ອງ ແລະ ໄລ່ພວກທ້ອງຖິ່ນ ເກົ່າອອກໄປຢູ່ເຂດນອກຕົວເມືອງຫມົດ. ການພັກພາອາໄສຢູ່ຮ່ອມນ້ອຍໆກົງແປັງ ຊ່ວຍ ໃຫ້ຫວູງຽນ ມີໂອກາດສັງເກດເບິ່ງຊີວິດການເປັນຢູ່ອັນແສນລຳບາກຂອງປະຊາຊົນ ຢູ່ ຕາມຄຸ້ມກຳມະກອນ ປາຣີ. ເພິ່ນໄດ້ເຫັນກັບຕາຕົນເອງວ່າ ຄວາມເປັນປໍລະປັກກັນ ທາງຊົນຊັ້ນເຊິ່ງປົກຄຸມໄປທົ່ວສັງຄົມນາຍທຶນຂອງຝະລັ່ງ ເປັນສິ່ງທີ່ບໍ່ອາດປະນີປະນອມ ໄດ້.

ໃນຄາວຮ່ວມມືກັບຫນັງສືພິມຝ່າຍຊ້າຍ ຫວູງຽນ ໄດ້ສັງເກດເຫັນດ້ວຍຄວາມຂົມ ຂື່ນວ່າ ຄົນຝະລັ່ງຮູ້ຈັກປະເທດຊາດຂອງຫວູງຽນຫນ້ອຍເກີນໄປ, ອາດເວົ້າໄດ້ວ່າພວກ

ເຂົາຍັງບໍ່ຮູ້ຈັກຫຍັງຈັກດີ້. ວັນທີ ໔ ເດືອນມັງກອນ ປີ ໑໙໔໐ ບົດລາຍງານການໜຶ່ງຂອງນັກສືບ ໂດຍມີນາມແຝງວ່າ ຈົງ ໝີ່ໜ້າທີ່ຕິດຕາມຫງວຽນ ໂດຍສະເພາະໄດ້ຖືກນຳມາວາງລົງເທິງໜ້າໂຕະເຮັດວຽກຂອງລັດຖະມົນຕີກະຊວງອານານິຄົມຝະລັ່ງ. ໝໍ່ນັກສືບລາຍງານວ່າ: "ທ່ານຫງວຽນອາຍກວັກ ຈົ່ມທຸກຈົ່ມຍາກວ່າ ຢູ່ຕາມປະເທດຕ່າງໆນັ້ນມີຄົນບໍ່ຮູ້ຫຍັງກ່ຽວກັບອິນດູຈີນ. ເພິ່ນໄດ້ແລກປ່ຽນຄຳເຫັນກັບຄົນຕ່າງປະເທດຫລາຍສົມຄວນ ແຕ່ພົບອອກມາ ບໍ່ມີໃຜຮູ້ກ່ຽວກັບສະພາບຕົວຈິງຂອງອິນດູຈີນ. ພວກເຂົາບໍ່ເຄີຍໄດ້ຍິນຊື່ສຽງຂອງປະເທດນີ້ຊ້ຳ, ນອກຈາກນັ້ນພວກເຂົາຍັງຄິດວ່າ ອິນດູຈີນແມ່ນພຽງແຕ່ເຂດຊາຍແດນຕັ້ງຢູ່ຫວ່າງອິນເດຍ ກັບ ຈີນ. ຫງວຽນອາຍກວັກ ເຫັນວ່າ ມີຄວາມຈຳເປັນຕ້ອງຂຽນ ແລະ ເວົ້າກ່ຽວກັບອິນດູຈີນຫລາຍເທົ່າໃດຍິ່ງເປັນການດີ . ເພິ່ນຈະຂໍຮ້ອງຕໍ່ບັນດາສະມາຊິກພັກສັງຄົມນິຍົມໃຫ້ດຳເນີນວຽກງານໂຄສະນາເລິກເຊິ່ງກ້ວາງຂວາງ ແລະ ມີໝາກຜົນ ເພື່ອໃຫ້ທຸກຄົນໄດ້ເຫັນສິ່ງໃດສິ່ງໜຶ່ງທີ່ກຳລັງເກີດຂຶ້ນຢູ່ອິນດູຈີນ..."

ດ້ວຍນ້ຳໃຈກະຕືລືລົ້ນທີ່ຢາກບອກຄົນຝະລັ່ງໃຫ້ຮູ້ຄວາມຈິງກ່ຽວກັບ ຄວາມປ່າເຖື່ອນໂຫດຮ້າຍຂອງພວກລ່າເມືອງຂຶ້ນຢູ່ອິນດູຈີນ, ກ່ຽວກັບຄວາມລຳບາກກາກກຳຂອງເພື່ອນຮ່ວມຊາດ ເຮັດໃຫ້ຫງວຽນ ຕັດສິນໃຈຂຽນບົດ ແລະ ພິມເປັນປຶ້ມໜຶ່ງເຫຼັ້ມ . ໃນບົດລາຍງານຕອນຕໍ່ໆໄປຂອງນັກສືບ ຈົງ ໄດ້ເວົ້າລະອຽດ ເຖິງການສົນທະນາກັນຢ່າງຈັບໃຈລະຫວ່າງ ຫງວຽນ ແລະ ເລີມ ທີ່ເປັນເພື່ອນຄົນໜຶ່ງຂອງເພິ່ນ.

ເລີມ ຖາມວ່າ: "ປານໃດ ເຈົ້າຈຶ່ງຈະຂຽນປຶ້ມຫົວນັ້ນແລ້ວ ?"

ທ່ານ ຫງວຽນໄດ້ຕອບວ່າ "ຄວາມຈິງຈະເວົ້າໃຫ້ຖືກຕ້ອງກໍຍາກຢູ່ ເພາະວ່າຂ້ອຍຍັງຕ້ອງການເອກະສານຫລາຍຢ່າງ, ຂ້ອຍບໍ່ຢາກເວົ້າຕົວະ ເຖິງເປັນພຽງ ປີກຍ່ອຍກໍຕາມ. ຂ້ອຍຈະຄັດເອົາບາງວັກຂອງປຶ້ມຕ່າງໆທີ່ຂຽນກ່ຽວກັບລະບອບ ລ່າເມືອງຂຶ້ນຂອງຝະລັ່ງ, ຈາກນັ້ນກໍຈະໃຫ້ຄຳອະທິບາຍບາງຕອນທີ່ເຫັນວ່າເໝາະສົມ. ປຶ້ມຫົວນີ້ປະກອບດ້ວຍ ໔ ພາກຄື ພາກໜຶ່ງ ເວົ້າກ່ຽວກັບອິນດູຈີນ ກ່ອນຍຸກຝະລັ່ງເຂົ້າມາຮຸກຮານ; ພາກສອງ ເວົ້າກ່ຽວກັບສິ່ງທີ່ພວກລ່າເມືອງຂຶ້ນໄດ້ເອົາມາໃຫ້ຄົນອິນດູຈີນ; ພາກສາມ ເວົ້າກ່ຽວກັບສະຖານະການອິນດູຈີນໃນປະຈຸບັນ; ພາກສີ່ ເວົ້າກ່ຽວກັບ ອິນດູຈີນໃນອະນາຄົດ".

ຫງວຽນ ຕັດສິນໃຈຕັ້ງຊື່ປຶ້ມຫົວນີ້ວ່າ "ຊາວຜູ້ຖືກກົດຂີ່". ໃນເດືອນມີນາ ປີ

໑໙໒໐, ການຂຽນຕົ້ນສະບັບໄດ້ສຳເລັດລົງ. ນັກສືບ ຊຸງ ລາຍງານວ່າ: "ຫງວຽນອາຍກວັກ ກະວ່າຈະພິມປຶ້ມດ້ວຍເງິນຕົນເອງ. ເພິ່ນໄດ້ລົມກັບ ເລິມ ວ່າ ປະຢັດເງິນໄດ້ ໓໐໐ ຝະລັ່ງແລ້ວ... ຕາມຄວາມເຫັນຂອງຂ້າພະເຈົ້າ, ບໍ່ຕ້ອງສົງໄສວ່າ ຈະມີອົງການຈັດຕັ້ງລັບໃດສະຫນອງເງິນແກ່ເພິ່ນ, ເພາະວ່າບຸກຄົນນີ້ເປັນຄົນມີຫລັກການ ທີ່ສຸດ. ເພິ່ນຕັ້ງໃຈວ່າຈັດພິມປຶ້ມເຫລັ້ມນີ້ດ້ວຍກ້ອນເງິນທີ່ຕົນເອງປະຢັດໄວ້".

ແຕ່ວ່າ ຕົ້ນສະບັບດັ່ງກ່າວບໍ່ໄດ້ພິມອອກ. ເມື່ອກັບມາເຮືອນໃນຕອນແລງ ວັນຫນຶ່ງ ຫງວຽນ ເຫັນປະກົດການອັນຫນຶ່ງຄືຕົ້ນສະບັບໄດ້ຫາຍໄປເສຍແລ້ວ ໂດຍທີ່ ບໍ່ມີຮ່ອງຮອຍຫຍັງເລີຍ. ຄົງຈະແມ່ນນັກສືບ ຊຸງ ຜູ້ນີ້ລະເປັນຜູ້ລັກຕົ້ນສະບັບ ເພາະວ່າມັນຕິດຕາມແຕ່ລະບາດກ້າວເດີນຂອງນັກປະຕິວັດຫວຽດນາມ. ແຕ່ວ່າ ວຽກງານ ກະກຽມຂຽນຕົ້ນສະບັບຂອງຫງວຽນອາຍກວັກ ກໍມີຜົນຢູ່. ບາງພາກຈາກປຶ້ມ "ຊາວຜູ້ຖືກກົດຂີ່" ໄດ້ຖືກບັນຈຸເຂົ້າໃນປຶ້ມ "ສານກ່າວຟ້ອງລະບອບລ່າເມືອງຂຶ້ນຝະລັ່ງ" ຊຶ່ງໄດ້ຖືກຈັດພິມອອກໃນປີ ໑໙໒໕.

ການທີ່ໄດ້ຍ້າຍມາຢູ່ບ່ອນໃຫມ່ ເຖິງວ່າເປັນຫ້ອງນອນກວ້າງເກົ້າແມັດ ມົນທົນ ແລະ ບໍ່ມີແສງແດດກໍຕາມ ແຕ່ກໍເປັນສິ່ງທີ່ ຫງວຽນຄອງຄອຍມາແຕ່ດົນແລ້ວ. ການຍ້າຍມາຢູ່ບ່ອນນີ້ຊ່ວຍໃຫ້ ຫງວຽນ ບໍ່ຂຶ້ນກັບ ຟານຈູຈິງ ແລະ ຟານວັນເຈື່ອງທາງດ້ານການເງິນ. ສ່ວນການພົວພັນກັບສອງທ່ານນີ້ມັນໄດ້ສູນເສຍບັນຍາກາດອົບອຸ່ນ ແລະ ຄວາມເອື້ອເຟື້ອໃນເມື່ອກ່ອນໄປແດ່ເລັກນ້ອຍ.

ອາດຈະເປັນຍ້ອນວ່າ ຟານຈູຈິງ ຖືກພວກລ່າເມືອງຂຶ້ນຝະລັ່ງຈັບກຸມຄຸມຂັງເພິ່ນຈຶ່ງທໍ້ຖອຍໃຈ. ແລ້ວຈຶ່ງເຊົາເຄື່ອນໄຫວການເມືອງ ແລະ ໃຊ້ເວລາສ່ວນໃຫຍ່ ຢູ່ໃນຫ້ອງຫລົ້ນບິນລຽດຢູ່ຖະຫນົນຊອກບອນ. ສ່ວນ ຟານວັນເຈື່ອງ ມັກເຮັດວຽກ ໃນເຮືອນຫລາຍກວ່າ, ເພາະເພິ່ນບໍ່ຮູ້ ແລະ ບໍ່ມັກເຮັດວຽກພົວພັນກັບຜູ້ອື່ນ. ນັ້ນຄືນິໄສ ຂອງເພິ່ນ. ຫງວຽນ ບໍ່ພໍໃຈຕໍ່ແນວຄິດຫຍໍ້ທໍ້ຂອງພວກເພິ່ນທັງສອງ. ແຕ່ພວກເພິ່ນ ທັງສອງພັດເຫັນການເຄື່ອນໄຫວຂອງຫງວຽນ ແລະ ຂອງ "ສະມາຄົມຊາວອານນາມ ຜູ້ຮັກຊາດ" ວ່າແມ່ນການສ່ຽງໄພທີ່ໄຮ້ດຽງສາ. ລະຫວ່າງເພິ່ນທັງສອງ ກັບ ຫງວຽນນັບມື້ນັບເກີດມີການຖົກຖຽງກັນຢ່າງຕຶງຄຽດຂຶ້ນຈຸກໄຈ. ບັນດານັກສືບມີຫນ້າທີ່ຕິດຕາມໂດຍກົງເບິ່ງເຮືອນຫລັງນີ້ແລ້ວລາຍງານຕໍ່ຂັ້ນເທິງວ່າ: "ເມື່ອມື້ໆນີ້, ເມື່ອຍາມຄ່ຳມາມັກມີການຖົກຖຽງກັນສຽງດັງຢູ່ໃນເຮືອນເລກທີ ໖, ຖະຫນົນ ໂກບະແລັງ. ເປັນທີ່ຮູ້ກັນວ່າ

ແນວຄິດຂອງ ຟານຈູຈິງ ແຕກຕ່າງຢ່າງຂາດຂັ້ນກັບແນວຄິດຂອງ ຫງວຽນອາຍກວັກ".
ເອກະສານສະບັບໜຶ່ງຂອງກະຊວງອານານິຄົມ ເວລານັ້ນຊີ້ໃຫ້ເຫັນວ່າ: "ຫງວຽນ - ອາຍກວັກ ຄ່ອຍໆກາຍເປັນຄົນໜຶ່ງທີ່ມີອິດທິພົນຕໍ່ຊາວອານນາມຢູ່ຝະລັ່ງ ແຕ່ໃນ ຂະນະດຽວກັນ ຟານຈູຈິງ ແລະ ຟານວັນເຈື່ອງ ຊ້ຳພັດສູນເສຍບົດບາດຂອງພວກເຂົາ".

ຫງວຽນ ມີຄວາມຮູ້ສຶກເສົ້າໃຈທີ່ເກີດຄວາມບໍ່ເຂົ້າໃຈກັນລະຫວ່າງເພື່ອນ ສະຫາຍ ເພາະວ່າເຖິງຢ່າງໃດກໍດີ, ເພິ່ນກໍຍັງມີຄວາມຮັກແພງຕໍ່ພວກເພິ່ນທັງສອງ. ເພິ່ນຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ທຸກສິ່ງທຸກຢ່າງທີ່ໄດ້ຮັບຈາກທັງສອງ. ການພົບພໍ້ຄັ້ງສຸດທ້າຍລະຫວ່າງເພິ່ນ ກັບເພື່ອນທັງສອງໄດ້ປະຄວາມຮູ້ສຶກອັນເຈັບແສບພິເສດ. ຟານຈູຈິງ ຫາກໍກັບມາຈາກພາກເໜືອຂອງປະເທດຝະລັ່ງ ຊຶ່ງເປັນບ່ອນທີ່ເພິ່ນມັກໄປ ຍ້ອນວ່າ ມີວຽກທີ່ກ່ຽວຂ້ອງກັບວຽກຖ່າຍຮູບຂອງເພິ່ນເອງຢູ່ເລື້ອຍໆ. ຕາມປົກກະຕິ ຕົກຕອນແລງ ມາທັງສາມຄົນມັກເຕົ້າໂຮມກັນຢູ່ໃນຫ້ອງເຮັດວຽກຂອງ ຟານວັນເຈື່ອງ. ຟານຈູຈິງ ພອມໂມໂຫ, ເພິ່ນລູບໆຄຳໆໜວດ ທັງໃຈຮ້າຍ ທັງແນມເບິ່ງ ຫງວຽນ ຈາກນັ້ນ ກໍເວົ້າເທື່ອລະຄຳວ່າ:

"ມີຄົນເວົ້າວ່າ ເຈົ້າໄປຫວ່ານໃບປິວ ແມ່ນຫລືບໍ່ ?"

"ເຈົ້າ, ນັ້ນຄືສານທວງເອົາສິດຂອງປະຊາຊົນເຮົາ. ລຸງເຈື່ອງ ໄດ້ຊ່ວຍເຫຼືອຫລານແຕ່ງເອກະສານນີ້ໃຫ້ຖືກຕ້ອງຕາມຫລັກພາສາຝະລັ່ງ, ສ່ວນຫລານ ແລະໝູ່ຂອງຫລານໃນສະມາຄົມນັ້ນ ຕ່າງກໍໄດ້ພະຍາຍາມເຜີຍແຜ່ສານດັ່ງກ່າວໃຫ້ມວນຊົນຮູ້ ຢ່າງກວ້າງຂວາງຢູ່ຝະລັ່ງ ແລະ ເຊັ່ນດຽວກັບຢູ່ອິນດູຈີນ. ການເຮັດຈັ່ງຊີ້ມີຫຍັງແດ່ທີ່ມັນ ບໍ່ຖືກຕ້ອງ ລຸງ? "

"ແມ່ນແລ້ວ, ຂ້ອຍໄດ້ຊ່ວຍເຫຼືອທ້າວຫງວຽນແທ້, ແຕ່ວ່າຂ້ອຍບໍ່ເວົ້າ ທັນທີໂລດວ່າ ມັນເປັນເລື່ອງຫລິ້ນກັບອັນຕະລາຍ ແລະ ອາດຈະຈົບລົງດ້ວຍຜົນຮ້າຍ".ຟານວັນເຈື່ອງ ເວົ້າຕື່ມ.

ຟານຈູຈິງ ເກີດໂມໂຫຢ່າງໃຫຍ່ວ່າ:

"ເຮັດແນວນັ້ນເປັນການສ່ຽງໄພທີ່ໄຮ້ດຽງສາແທ້ໆ! ຂ້ອຍກໍເຄີຍເວົ້າແລ້ວ ເດ ແລະ ດຽວນີ້ຂ້ອຍຂໍເວົ້າຊ້ຳອີກວ່າ ຝະລັ່ງແມ່ນປະເທດສີວິໄລປະເທດໜຶ່ງ, ຝະລັ່ງໄດ້ນຳເອົາ ແສງສະຫວ່າງ ແລະ ຄວາມຮູ້ມາໃຫ້ພວກເຮົາ. ພວກເຮົາມີແຕ່ຢາກໄດ້ການປະຕິຮູບເທົ່ານັ້ນ. ຜູ້ທີ່ສ້າງເຄາະກຳແກ່ປະຊາຊົນເຮົານັ້ນແມ່ນເຈົ້າຊີວິດທີ່ປ່ອງບ້ານພວກ

ເສນາອາມາດ ແລະ ພວກສັກດິນາຜູ້ໂລບມາກໂລພາ, ຫວຽດນາມ ຕ້ອງການ ໃຫ້ມີການສ້າງຕັ້ງສາທາລະນະລັດ ແລະ ການຊ່ວຍເຫລືອຈາກປະເທດຝະລັ່ງ".

"ລຸງທົ່ນບໍ່ຖື, ລຸງເວົ້າເຖິງຄວາມສີວິໄລອີ່ຫຍັງ ?" ຫງວຽນ ຍົກມືຂຶ້ນທັງສອງເບື້ອງດ້ວຍຄວາມໂມໂຫ. " ບໍ່ມີເຫດຜົນເລີຍ ລຸງຍັງບໍ່ທັນຮູ້ເຫັນໂທດກຳລົ້ນຟ້າເຫລືອດິນ ທີ່ພວກໂຈນລ່າເມືອງຂຶ້ນຝະລັ່ງກໍ່ຂຶ້ນຢູ່ເທິງດິນແດນປະເທດເຮົາ ! ຄຸກຕະລາງ ມີຫລາຍກວ່າໂຮງຮຽນ ແລະ ຄຸກຕະລາງຫລັງໃດກໍ່ມີເຕັມແຕ່ນັກໂທດ. ປະຊາຊົນ ເຮົາຖືກຈຳແນກເຊື້ອຊາດ, ພວກເຂົາບໍ່ມີສິດພື້ນຖານອັນໃດຈັກດີ. ພວກລ່າເມືອງຂຶ້ນບໍ່ພຽງແຕ່ກົດຂີ່ຫນີບເຕັງເທົ່ານັ້ນ ແຕ່ຫາກຍັງເຍາະເຍີ້ຍ ແລະ ດູຫມິ່ນພວກເຮົາ, ພວກມັນຍັງບັງຄັບປະຊາຊົນເຮົາໃຫ້ດື່ມເຫລົ້າ ສູບຝິ່ນ ກິນຊາ ເພື່ອເບື່ອເມົາພວກເຮົາ, ເຮັດໃຫ້ພວກເຮົາໂງ່ຈ້າຊັກໄຊ້. ຄວາມສີວິໄລຫຍັງລະ? ນີ້ລຸງເບິ່ງດູ, "ພວກທີ່ແຜ່ຂະຫຍາຍຄວາມສີວິໄລ" ມີທ່າທີຕໍ່ ປະຊາຊົນພື້ນເມືອງ ຄືແນວໃດ, ຫລານໄດ້ອ່ານເລື່ອງນີ້ຢູ່ໃນຫນັງສືພິມດັ່ງນີ້:

ຢູ່ໄຮຟອງ, ມີຊ່າງແປງເຄື່ອງຈັກຄົນຫນຶ່ງຊື່ວ່າ ຣັງຣີ ສັນຊາດຝະລັ່ງ ໄດ້ໃຊ້ປືນຍິງຊາຍຄົນຫນຶ່ງຕາຍກັບທີ່ ຂະນະທີ່ລາວໄລ່ຕິດຕາມຍິງສາວຄົນຫນຶ່ງຢູ່ໃກ້ເຮືອນຂອງເຂົາ. ຄົນທີ່ຖືກຂ້າຕາຍແມ່ນຄົນເອີລົບ. ເມື່ອສອບສວນ, ຫມໍຣັງຣີ ຈຶ່ງຕອບແບບຫນ້າຕາເສີຍ: "ຂ້ອຍຄິດວ່າມັນເປັນຄົນທ້ອງຖິ່ນ".

ລຸງຍັງຈຳໄດ້ບໍ່ວ່າ ເປັນຫຍັງ ຈຶ່ງເກີດມີການລຸກຮື້ຂຶ້ນຢູ່ ຖາຍງວຽນ ບ່ອນ ທີ່ມີການນອງເລືອດ ແລະ ມີຄົນຢ່າງຫລວງຫລາຍທີ່ບໍ່ມີໂທດກຳຫຍັງຖືກຂ້າຕາຍ ?ການລຸກຮື້ຂຶ້ນເກີດຂຶ້ນຍ້ອນການກະທຳອັນປ່າເຖື່ອນໂຫດຮ້າຍຂອງເຈົ້າແຂວງ ດາກເລີ ນັ້ນລະ. ເພື່ອຂູດເອົາເງິນຂອງປະຊາຊົນ, ມັນໄດ້ຈັບປະຊາຊົນເຮົາເຂົ້າຄຸກຕະລາງແລະກະໂຕມັນເອງນັ້ນລະຫຸບຕີພວກເຂົາ, ມັນອອກຄຳສັ່ງຝັງຄົນຫວຽດນາມທັງເປັນທີ່ບໍ່ມີຄວາມຜິດ ຊຶ່ງຢູ່ກ້ອງອຳນາດມັນ, ແລະ ເມື່ອໃກ້ໃຈຈະຂາດຈຶ່ງປ່ອຍໃຫ້ປີນຂຶ້ນຈາກຂຸມ. ຈັ່ງຊີ້ແລ້ວ ຫມາຍຄວາມວ່າແນວໃດກັນ ? ລຸງເຊື່ອວ່າ ລັດຖະບານຝະລັ່ງໄດ້ປັບໄຫມ ລົງໂທດທ່ານ ດາກເລີ ຫລືບໍ່ ? ຝະລັ່ງຮອດວ່າບໍ່ຄິດເຖິງເລື່ອງນີ້ຊ້ຳ".

"ແລ້ວເຈົ້າຄິດວ່າ ສານຫວງເອົາສິດຂອງເຈົ້າ ຈະທັນປ່ຽນສະຖານະການ ໄດ້ຫລືບໍ່ ?" ຟານວັນເຈືອງ ຍິ້ມຢ່າງເຢັນຊາຖາມຂຶ້ນ.

"ບໍ່ດອກ, ຫລານບໍ່ຄິດຄືຈັ່ງຊັ້ນ, ແຕ່ກໍ່ບໍ່ຄວນຈະມານັ່ງມັດມືຕີນເອງ.ຕ້ອງເຮັດ

ອັນໃດອັນໜຶ່ງ. ຕ້ອງເຕົ້າໂຮມ, ຕ້ອງຈັດຕັ້ງອົງການຈັດຕັ້ງຕ່າງໆ, ຮວບຮວມກຳລັງ ບໍ່ຄວນອາໄສນຳຄວາມເມດຕາຂອງພວກລ່າເມືອງຂຶ້ນເລີຍ. ຖ້າຈະສົນທະນາພາທີ ກັບພວກເຂົາກໍເທົ່າກັບເປົ່າປີ່ໃສ່ຫູຄວາຍຊຸ້ມລະ. ໂດຍອາໄສກຳລັງແຮງ ຈຶ່ງຈະໄດ້ອິດສະຫລະພາບມາໃຫ້ແກ່ປະເທດຊາດ, ຫລານນ້ອງບໍ່ເຫັນເສັ້ນທາງອື່ນອີກແລ້ວ. ນັບຕັ້ງແຕ່ສະໄໝບູຮານພຸ້ນມາ, ປະຊາຊົນເຮົາມີມູນເຊື້ອຕໍ່ສູ້ພິລະອາດຫານ ຕ້ານສັດຕູ ຮຸກຮານຕ່າງປະເທດ. ລູງກໍຄົງຈຳໄດ້ເຖິງໄຊຊະນະຂອງ ເລເລີຍ, ເຈີ່ນຮຶງດາວ, ກວາງຈູງ. ຈາກນັ້ນກໍແມ່ນກອງກຳລັງລຸກຮືຂຶ້ນ ເພີນດິງຟູ່ງ ແລະ ຮ່ວາງຮົວຖາມ ໄດ້ສູ້ຮົບພິລະອາດຫານ ຕ້ານພວກລ່າເມືອງຂຶ້ນຝະລັ່ງ. ຢູ່ປະເທດລັດເຊຍ, ປະຊາຊົນ ໄດ້ຍາດເອົາອຳນາດການປົກຄອງມາມືຕົນເອງສຳເລັດ. ປະເທດຈີນ ຢູ່ໃກ້ຄຽງພວກເຮົາ ກໍໄດ້ລຸກຂຶ້ນຕໍ່ສູ້ຄືກັນ".

"ບໍ່ຄວນໃຊ້ຄວາມຮຸນແຮງໃດໆ,ຄວາມຮຸນແຮງ ໝາຍເຖິງຄວາມຕາຍ".ຟານຈູຈິງ ເວົ້າເນັ້ນຄຳເວົ້າແຕ່ລະຄຳ. ຖັດຈາກນັ້ນຄືຈິ່ງວ່າສືບຕໍ່ຖົກຖຽງກັນ ກັບຟານໂບ້ຍເຈົາ ຊຶ່ງເປັນຄູ່ປໍລະປັກທາງດ້ານແນວຄິດຜູ້ເກົ່ານັ້ນ ຟານຈູຈິງ ເວົ້າຕື່ມວ່າ: "ບໍ່ຄວນອາໄສນຳຕ່າງປະເທດ, ເຮັດຈັ່ງຊີ້ແລ້ວກໍເທົ່າກັບວ່າ ໂງ່ຈ້າ".

ຫລັງຈາກທີ່ຢຸດຢູ່ໜ້ອຍໜຶ່ງ ຟານບ້ອນເຈື່ອງ ກໍເວົ້າຂຶ້ນວ່າ "ໜ້າທີ່ ຂອງພວກເຮົາ ແມ່ນເປີດຫູເປີດຕາໃຫ້ປະຊາຊົນເຮົາທີ່ກຳລັງຈົມຢູ່ໃນຄວາມມືດ, ຄວາມໂງ່ຈ້າ. ຈຳເປັນຕ້ອງນຳເອົາວິຊາຄວາມຮູ້ໄປຮອດບ່ອນເຂົາ, ໃນນັ້ນມີທັງຄວາມຮູ້ ດ້ານການເມືອງ. ເຮັດວຽກນີ້ ກໍຕ້ອງຄ່ອຍເປັນຄ່ອຍໄປ, ຮອບຄອບຖີ່ຖ້ວນ. ສ່ວນວ່າເຮັດ ຄືເຈົ້າທີ່ກຳລັງເຮັດ, ການກ່າວຄຳປາໄສແບບທາເລື່ອງຂອງເຈົ້າຢູ່ໃນການປະຊຸມ ຕາມສະໂມສອນ, ຕາມການໂຮມຊຸມນຸມມິດຕິງຕ່າງໆຂອງຊາວກຳມະກອນ, ໃບປິວຕ່າງ ໆ ນັ້ນ ລ້ວນແຕ່ແມ່ນເລື່ອງໄຮ້ດຽງສາ, ຍິ່ງກວ່ານັ້ນ ຂ້ອຍຂໍເວົ້າໂດຍກົງວ່າ ມັນແມ່ນເລື່ອງໄຮ້ດຽງສາທີ່ເປັນອັນຕະລາຍທີ່ສຸດ. ອີກບໍ່ດົນເຈົ້າອາດຈະຕົກເຂົ້າ ໃນຕາໜ່າງຂອງເຈົ້າໜ້າທີ່ຕຳຫລວດໄດ້".

ການຖົກຖຽງກັນໃນວັນນັ້ນ ລະຫວ່າງສາມຕົວແທນຂອງຂະບວນການ ຮັກຊາດຫວຽດນາມ ໄດ້ດຳເນີນໄປຈົນເຖິງທ່ຽງຄືນ ເຖິງແມ່ນວ່າບໍ່ແມ່ນການຖົກຖຽງກັນ ເປັນເທື່ອທຳອິດ. ແນ່ນອນວ່າເວລານັ້ນ ຫງວຽນ ຍັງບໍ່ຮູ້ປະໂຫຍກຄວາມເວົ້າ ອັນໂດ່ງດັງຂອງ ກາກມາກ: "ແຕ່ລະບາດກ້າວເດີນຂອງຂະບວນການຕົວຈິງຍັງສຳຄັນກວ່າ ໂຄງ

ການການເມືອງສິບສອງສະບັບ" *. ດ້ວຍອິນຊີສຳຜັດທີ່ຫຼັກຂອງນັກປະຕິວັດ ແທ້ຈິງ ຫວງອຽນບໍ່ພຽງແຕ່ຮູ້ສຶກໃນຄວາມຕ້ອງການແຕ່ຫາກຍັງລວມທັງຄວາມຈຳເປັນຕ້ອງກະທຳ ເພື່ອຊ່ວຍເຫຼືອ ມະຫາຊົນທີ່ກຳລັງຕໍ່ສູ້, ປຸກລຸກມະຫາຊົນທີ່ກຳລັງຍອມຈຳນົນຕໍ່ຊີວິດ ຂາທາດ.

ເຖິງແມ່ນວ່າ ໄດ້ຍ້າຍມາຢູ່ຮ່ອມນ້ອຍໆ ກົງແປ້ງ ກໍຕາມ ຫວງອຽນ ກໍບໍ່ໄດ້ຕັດຂາດຈາກການພົວພັນກັບພວກເພິ່ນທັງສອງ, ແຕ່ຫາກມັກໄປຢ້ຽມຢາມດູແລພວກເພິ່ນທັງສອງເປັນປະຈຳ. ຫວງອຽນບໍ່ອາດເປັນເອກະພາບກັບເພິ່ນທັງສອງໄດ້ ກໍເພາະວ່າ ເພິ່ນເຊື່ອໝັ້ນໃນຄວາມຖືກຕ້ອງຂອງຕົນ, ແຕ່ກໍຍັງເຄົາລົບນັບຖືພວກເພິ່ນທັງສອງຢູ່ ທັງນີ້ກໍເພາະເພິ່ນທັງສອງແມ່ນຄົນທີ່ມີຜົນງານຕໍ່ປະເທດຊາດ. ຟານຈູຈິ໋ງ ແມ່ນແບບຢ່າງຂອງຊາວໜຸ່ມຫວຽດນາມຮັກຊາດມາເປັນເວລາດົນນານ. ໃນປີ ໑໙໒໕ ເພິ່ນອອກຈາກຝະລັ່ງໄປປະເທດຊາດແລະ ໄດ້ເສຍຊີວິດຢ່າງກະທັນຫັນ. ສຳລັບຊາວຫວຽດນາມຜູ້ມີຄະຕິ ທຳການຕາຍຂອງເພິ່ນນັ້ນ ຖືວ່າເປັນໂສກນາດຕະກຳທີ່ຍິ່ງໃຫຍ່ຂອງທົ່ວປວງຊົນ. ຢູ່ໃນພິທີສົ່ງສະການທີ່ຈັດຂຶ້ນຢູ່ໄຊງ່ອນ ມີຜູ້ເຂົ້າຮ່ວມ ໑໔໐ ພັນຄົນ, ພວກເຂົາເຈົ້າ ພາກັນແຫ່ສົບຂອງຜູ້ຮັກຊາດທີ່ເຖິງແກ່ກຳກ່ອນອາຍຸໄປ. ຂະບວນແຫ່ທີ່ມີຈຳນວນ ຫຼວງຫຼາຍຖືກຈັດຕັ້ງຂຶ້ນຢູ່ຕາມບັນດາຕົວເມືອງຮ່າໂນ້ຍ, ໄຮຟອງ, ນາມດິງ ເຊັ່ນດຽວກັນ.

ເຖິງແມ່ນວ່າເປັນປັນຍາຊົນຂາດຄວາມກ້າຫານທັງເປັນຜູ້ມັກຕັກເຕືອນ ຫວງອຽນໃຫ້ມີຄວາມຮອບຄອບຖີ່ຖ້ວນເລື້ອຍໆກໍຕາມ, ແຕ່ຟານວັນເຈື່ອງ ກໍມີຜົນງານຫຼາຍ ໃນການໂຄສະນາເຜີຍແຜ່ທິດສະດີຂອງລັດທິມາກເຂົ້າສູ່ ຫວຽດນາມ. ເພິ່ນເປັນຄົນຫວຽດນາມຜູ້ທຳອິດທີ່ແປ "ຖະແຫຼງການຂອງພັກກອມມູນິດ" ມາເປັນພາສາຫວຽດນາມ. ເພິ່ນຍັງໄດ້ຂຽນບົດລົງໜັງສືພິມຈຳນວນໜຶ່ງ ກ່ຽວກັບທິດສະດີຂອງລັດທິມາກ. ເມື່ອກັບຄືນປະເທດແລ້ວ ເພິ່ນໄດ້ຈັດພິມໜັງສືພິມ "ອານນາມ" ເຊິ່ງໃນຊຸມປີ ໒໐ ໄດ້ກາຍມາເປັນໜຶ່ງໃນຈຳນວນໜັງສືພິມທີ່ກ້າວໜ້າທີ່ສຸດຢູ່ນາມກີ.

ເຖິງແມ່ນວ່າການຕັດຂາດຈາກເພື່ອນເກົ່າທັງສອງ ຈະເປັນບັນຫາໜຶ່ງທີ່ໜັກໜ່ວງສຳລັບ ຫວງອຽນ ກໍຕາມ, ແຕ່ບັນຫາດັ່ງກ່າວເປັນສິ່ງທີ່ຫຼີກເວັ້ນບໍ່ໄດ້. ກ່ຽວກັບແນວຄິດ, ຫວງອຽນ ໄດ້ກ້າວໄປໄກກວ່າພວກເພິ່ນທັງສອງຕັ້ງຫຼາຍເທົ່າ. ຫວງອຽນເປັນ

---

* ກ. ມາກ, ຝ. ອັງແກນ. ນິພົນຄັດຈຸດ, ເຫຼັ້ມທີ໔, ໜ້າ ໑໑໑. (ເປັນພາສາລັດເຊຍ)

ຄົນຫນຶ່ງທີ່ສະແຫວງຫາສິ່ງໃຫມ່ຢູ່ເລື້ອຍໆ ແລະ ບໍ່ຍອມຮັບທຸກປະກົດການ ຂອງແນວຄິດຄອງເດີມ, ຍ້ອນແນວນັ້ນ ເພິ່ນຈຶ່ງບໍ່ຍອມຢູ່ພາຍໃຕ້ແອກ ຂອງຄວາມໄຝ່ຝັນລອຍເມກທາງສັງຄົມ ແລະ ຂອງຄວາມຫລົງຜິດດ້ານການເມືອງ ທີ່ມີຢູ່ນຳພວກຜູ້ນຳຂະບວນການແຫ່ງຊາດ-ຮັກຊາດ ໃນທ້າຍສະຕະວັດທີ ໑໙ ແລະ ຕົ້ນສະຕະວັດທີ ໒໐. ອຸປະນິໄສກັບລັກສະນະເປັນຄົນມັກເຄື່ອນໄຫວຂອງເພິ່ນ ແທດເຫມາະກັບຈິດໃຈປະຕິວັດ, ເພິ່ນໄດ້ຫລຸດລອດຈາກພະຍາດນິຍົມປະຕິຮູບຢ່າງປອດໄພ. ຕ່າງກັບເພື່ອນເກົ່າຂອງເພິ່ນ ທັງສອງ ຫງວຽນ ໄດ້ຮັບຮູ້ວ່າຮອດເວລາແລ້ວ ທີ່ຈະຕ້ອງເຊື່ອມຈອດອຸດົມຄະຕິແຫ່ງຊາດ-ຮັກຊາດ ເຂົ້າກັບ ຫລັກທິດສະດີ ມາກ-ເລນິນ.

ດາບວິເສດ

ຢູ່ປະເທດຂ້ອຍ ມີນິທານເລື່ອງຫນຶ່ງກ່ຽວກັບຖົງ
ໄຫມຄຳ. ເວລາພົບຂໍ້ຫຍຸ້ງຍາກໃຫຍ່ຫລວງຈຶ່ງເປີດຖົງ
ໄຫມຄຳອອກມາ ແລ້ວຈະພົບວິທີແກ້ໄຂ. ລັດທິ ເລນິນ
ກໍແມ່ນຄັງສົມບັດແຫ່ງປັນຍາອັນວິເສດຄືແນວນັ້ນ.

ໂຮ່ຈີມິນ

໑

ຢ່ວງເຂົ້າປີ ໑໙໑໙-໑໙໔໐, ພາຍຫລັງທີ່ສາກົນກອມມູນິດທີ 3 ເຊິ່ງເປັນອົງການກອມມູນິດສາກົນຖືກສ້າງຕັ້ງຂຶ້ນໂດຍຫົວຄິດລິເລີ່ມຂອງ ວ.ອີ.ເລນິນ ຢູ່ໃນຂະບວນການກຳມະກອນບັນດາປະເທດນາຍທຶນໄດ້ເກີດມີການຕໍ່ສູ້ອັນດຸເດືອດລະຫວ່າງກຳລັງປະຕິວັດອັນແທ້ຈິງກັບຜູ້ນຳຝ່າຍປະຕິຮູບນິຍົມ, ອັນແມ່ນການຕໍ່ສູ້ເພື່ອສ້າງຕັ້ງພັກແບບໃຫມ່ຊຶ່ງ

ໄດ້ແກ່ພັກກອມມູນິດ ທີ່ມີໜ້າທີ່ ເປັນຜູ້ນຳພາ ຂະບວນການປະຕິວັດ ແລະ ຈັກຈູງມະຫາຊົນຜູ້ອອກແຮງງານຈຳນວນຫລວງຫລາຍໄປນຳຕົນ. ຢູ່ຝະລັ່ງນັ້ນ ຝ່າຍປະຕິວັດຂອງພັກສັງຄົມນິຍົມກໍໄດ້ນຳພາການຕໍ່ສູ້ເພື່ອສ້າງຕັ້ງພັກແບບໃໝ່ ແລະ ເພື່ອເຂົ້າຮ່ວມໃນອົງການກອມມູນິດສາກົນ. ຕົກມາຮອດຕອນທ້າຍຂອງປີ ໑໙໑໙, ໝາຍຄວາມວ່າພາຍຫລັງສົງຄາມໂລກຈົບລົງໄດ້ໜຶ່ງປີ ຈຳນວນສະມາຊິກພັກສັງຄົມນິຍົມຝະລັ່ງໄດ້ເພີ່ມຂຶ້ນເກືອບໜຶ່ງແສນຄົນ. ສ່ວນໃຫຍ່ຂອງພາກສ່ວນເພີ່ມເຕີມ ປະກອບດ້ວຍຕົວແທນຂອງ "ຮຸ່ນຄົນທີ່ຜ່ານແປວໄຟສູ້ຮົບ" ເຊິ່ງໄດ້ແກ່ບັນດາຊາວກຳມະກອນໜຸ່ມນ້ອຍທີ່ໄດ້ຮັບອິດທິພົນຢ່າງຫລວງຫລາຍທາງດ້ານແນວຄິດຂອງການປະຕິວັດເດືອນຕຸລາ ຜູ້ຖືກຮັບເຂົ້າພັກສັງຄົມນິຍົມໃນວັນດັ່ງກ່າວນັ້ນມີ ໝໍຣິດ ໂຕເຣ, ຊັກ ດູຍກະໂລ . ໃນເວລາຕໍ່ມາບຸກຄົນດັ່ງກ່າວນີ້ ໄດ້ກາຍມາເປັນຜູ້ນຳຂະບວນການກຳມະກອນຝະລັ່ງ. ກຳລັງໜຸ່ມນ້ອຍຂອງພັກນີ້ຍັງຂັດແຍ່ງກັນກັບນະໂຍບາຍປະຕິຮູບນິຍົມຂອງບັນດາຫົວໜ້າ ແລະ ທວງໃຫ້ພັກຖອນຕົວອອກຈາກສາກົນທີ 2 ແລະ ເຂົ້າຮ່ວມສາກົນທີ 3 ຂອງເລນິນ.

ການເຄື່ອນໄຫວໂຄສະນາຂອງພະແນກຝະລັ່ງ ທີ່ຂຶ້ນກັບພັກກອມມູນິດໂບນເຊວິກລັດເຊຍ ໄດ້ປະກອບສ່ວນບໍ່ໜ້ອຍ ເຂົ້າໃນການເຜີຍແຜ່ແນວຄິດຂອງສາກົນທີ 3 ຢູ່ໃນໝູ່ມະຫາຊົນຜູ້ອອກແຮງງານຝະລັ່ງ. ພະແນກດັ່ງກ່າວຖືກສ້າງຕັ້ງຂຶ້ນໃນເດືອນ ສິງຫາ ປີ ໑໙໑໗ ໂດຍມີ ອິແນດຊາ ອັກມັງ, ຊັງມາ ລີອາບວັກ ແລະ ຊັກ ຊາດູນ ເປັນຜູ້ຮັບຜິດຊອບ. ໃນຊ່ວງໄລຍະທີ່ການນັດຢຸດງານເດືອນ ພຶດສະພາ ປີ ໑໙໑໙ ພຸ່ງຂຶ້ນສູ່ລະດັບສູງສຸດນັ້ນ ຢູ່ປາຣີ ມີອົງການຈັດຕັ້ງໃໝ່ເກີດຂຶ້ນ. ນັ້ນຄື ຄະນະກຳມະການຕໍ່ສູ້ເພື່ອເຂົ້າຮ່ວມໃນສາກົນທີ 3. ບັນດາຕົວແທນຝ່າຍປະຕິວັດຂອງພັກສັງຄົມນິຍົມ ຝະລັ່ງຖືການໂຄສະນາແນວຄິດກອມມູນິດວ່າ ແມ່ນໜ້າທີ່ອັນສຳຄັນຂອງອົງການຈັດຕັ້ງໃໝ່ນີ້.

ກອງປະຊຸມຂອງໜ່ວຍພັກຄຸ້ມ ເຊິ່ງເປັນບ່ອນທີ່ ຫງວຽນ ພະຍາຍາມເຂົ້າຮ່ວມຢ່າງສະໝ່ຳສະເໝີນັ້ນ ຍັງນັບວັນນັບຟົດຟື້ນຂຶ້ນຈັກໄຊ. ບັນດາຜູ້ກ່າວຄຳປາໄສຜັດປ່ຽນກັນເວົ້າຈົນລໍແຫບ, ຈາກນັ້ນນັ່ນຕໍ່ໃສ່ນັ້ນ ພວກເຂົາເຈົ້າຖົກຖຽງກັນກ່ຽວກັບບັນຫາທີ່ວ່າສາກົນໃດຈະຕອບສະໜອງສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນຝະລັ່ງຫລາຍກວ່າໝູ່. ອຸປະນິໄສຂອງຄົນຝະລັ່ງ ເຮັດໃຫ້ການຖົກຖຽງກັນຟົດຟື້ນເຫລົ່ານັ້ນຍິ່ງມີສີສັນ ພິເສດ. ຫງວຽນຕັ້ງໃຈຟັງບັນດາຜູ້ກ່າວຄຳປາໄສ ເຖິງແມ່ນວ່າຕົນເອງບໍ່ເຂົ້າໃຈ ເນື້ອໃນບົດປາໄສຂອງພວກເຂົາຢ່າງຄົບຖ້ວນກໍຕາມ. ມີຄົນຈຳນວນໜຶ່ງ ມັກໃຊ້ສັບສູງເກີນ

ຂອບເຂດ ເຊັ່ນ: "ລັດທິສັງຄົມນິຍົມແບບໄຟຟັນລອຍເມກ", "ອະນາທິປະໄຕ","ລັດທິປະຕິຮູບນິຍົມ", "ລັດທິກຳມະບານ" ແລະ ອື່ນໆ ແຈ້ງ - ຈຶນິງ, ຟູຣິເອ, ບະລັງກີ. ແຕ່ວ່າຮູບພາບລວມກໍຄ່ອຍໆປະກົດຕົວຂຶ້ນຢູ່ຕໍ່ໜ້າຂອງເພິ່ນ ແລະ ນັບວັນ ຍິ່ງເຫັນແຈ້ງຂຶ້ນຈັກໄຈ. ບັນດາຜູ້ທີ່ເຂົ້າຮ່ວມຊຸມນຸມ ເຊັ່ນດຽວກັບພັກທັງໝົດ ໃນສະໄໝນັ້ນ ໄດ້ແບ່ງອອກເປັນສາມຝ່າຍຢ່າງຈະແຈ້ງ. ບັນດານັກສັງຄົມນິຍົມຝ່າຍຊ້າຍ ສະໜັບສະໜູນການເຂົ້າຮ່ວມໃນສາກົນກອມມູນິດໂດຍ ຖືວ່ານັ້ນເປັນໜໍ່ແໜງແຫ່ງການຕໍ່ສູ້ປະຕິວັດອັນແທ້ຈິງ ເພື່ອປົດປ່ອຍຊົນຊັ້ນກຳມະກອນອອກຈາກແອກຄ່ອບຄອງຂອງຊົນຊັ້ນນາຍທຶນ. ຝ່າຍຂວາ ຮຽກຮ້ອງໃຫ້ຟື້ນຟູສາກົນທີ 2 ຂຶ້ນ. ອີງຕາມຄວາມເວົ້າ ພວກເຂົາ, ສາກົນທີ 2 ເບິ່ງຄືວ່າຕອບສະໜອງມູນເຊື້ອປະຊາທິປະໄຕ ຂອງປະເທດສາທາລະນະລັດຝະລັ່ງໄດ້ຫລາຍກວ່າ. ບັນດາຜູ້ທີ່ເດີນຕາມສາຍກາງ ພັດຕໍ່ສູ້ ທວງໃຫ້ປັບປຸງປ່ຽນແປງສາກົນທີ 2 ດ້ວຍວິທີຊຳລະສະສາງມູນພາກທີ່ບໍ່ເປັນສັງຄົມນິຍົມ". ຝ່າຍນີ້ຖືກເອີ້ນວ່າເປັນ "ຝ່າຍນິຍົມລົງເກ" ເພາະວ່າຫົວໜ້າພວກເຂົາແມ່ນ ຈັງ ລົງເກ.

ສິ່ງທີ່ເຮັດໃຫ້ຫວຽນກຽດແຄ້ນ ແມ່ນວ່າບັນດາຜູ້ກ່າວຄຳປາໄສ ພຽງແຕ່ເວົ້າກ່ຽວກັບບັນຫາອະນາຄົດຂອງຂະບວນການກຳມະກອນຝະລັ່ງ ແຕ່ບໍ່ໄດ້ເວົ້າເຖິງບັນຫາໂຊກຊາຕາຂອງບັນດາປະຊາຊາດເມືອງຂຶ້ນຈັກດີ້ເລີຍ. ມີຢູ່ເທື່ອໜຶ່ງ ຢູ່ກອງປະຊຸມສະໄໝໜຶ່ງ ໃນເວລາທີ່ທຸກຄົນຖົກຖຽງກັນຢ່າງຟົດເດືອດ ຫວຽນຈະນັ່ງເສີຍເມີຍຢູ່ບໍ່ໄດ້ອີກແລ້ວ, ເຂົາລຸກຂຶ້ນ ແລະ ຂໍອະນຸຍາດອອກຄວາມເຫັນວ່າ:

"ບັນດາເພື່ອນທີ່ຮັກແພງ! ພວກເພື່ອນ ລ້ວນແຕ່ເປັນຄົນສັງຄົມນິຍົມທັງນັ້ນ, ດີຫລາຍ! ພວກເພື່ອນທັງໝົດ ລ້ວນແຕ່ຢາກປົດປ່ອຍຊົນຊັ້ນກຳມະກອນ! ຖາດັ່ງນັ້ນເຖິງແມ່ນວ່າຈະມີສາກົນທີ 2 , ທີ 3 ຫລື 3 ເຄິ່ງ ກໍຕາມ ກໍຄືກັນທັງໝົດນັ້ນລະ... ເຖິງແມ່ນວ່າພວກເພື່ອນ ເຂົ້າຢູ່ໃນສາກົນນີ້ ຫລື ສາກົນນັ້ນ ແຕ່ພວກເພື່ອນຕ້ອງສາມັກຄີເປັນເອກະພາບກັນກໍເພາະວ່າ ພວກເພື່ອນມີພາລະໜ້າທີ່ອັນໜຶ່ງທີ່ມີຈຸດປະສົງ ອັນດຽວ. ແຕ່ເປັນຫຍັງ ຈຶ່ງຖົກຖຽງກັນຫລາຍແທ້ ? ໃນຂະນະທີ່ພວກເພື່ອນຖົກຖຽງກັນຢູ່ນັ້ນ, ເພື່ອນຮ່ວມຊາດຂອງພວກຂ້າພະເຈົ້າກຳລັງທຸກທໍລະມານຢູ່ອິນດູຈີນຍອນແອກຄອບຄອງຂອງພວກລ່າເມືອງຂຶ້ນ..."

ຫລັງຈາກເລີກປະຊຸມ, ນາງສາວ ໂຣສາ ຊ່າງຕັດຫຍິບ ຫົວຈັກຫລັກແຫຼ່ງຂອງໜ່ວຍພັກຄົນໜຶ່ງ ຊຶ່ງຫວຽນຮູ້ຈັກຢູ່ໃນການໂຮມຊຸມນຸມມິດຕິງ ໄດ້ເວົ້ານຳຫວຽນວ່າ:

" ສະຫາຍຫງວຽນ ເປັນການຍາກສຳລັບເຈົ້າ ທີ່ຈະໄຈ້ແຍກບັນຫາ ເພາະສະຫາຍຫາກໍ່ຖືກຮັບເຂົ້າໃນພັກ, ແຕ່ເຮົາເຊື່ອວ່າ ໃນອັນຕໍ່ໄປ ສະຫາຍ ຈະເຂົ້າໃຈວ່າ ເປັນຫຍັງພວກເຮົາຈຶ່ງຖົກຖຽງກັນຫລາຍແທ້, ທັງນີ້ກໍ່ເພາະວ່າມັນພົວພັນໄປຮອດອະນາຄົດຂອງອິນຊູັນກຳມະກອນຂອງພວກເຮົາ ".

ຈິດໃຈຂອງຫງວຽນຍາມໃດກໍ່ຢູ່ຄຽງຂ້າງກັບນັກສັງຄົມນິຍົມຝ່າຍຊ້າຍ ເຊິ່ງເປັນຜູ້ທີ່ຕໍ່ສູ້ເພື່ອປົກປ້ອງບັນດາປະຊາຊາດຂອງປະເທດເມືອງຂຶ້ນ. ຄວາມຈິງແລ້ວ ບັນດາເພື່ອນທີ່ດີທີ່ສຸດ ຜູ້ທີ່ມີແນວຄິດຄ້າຍຄືກັນກັບເພິ່ນ ແມ່ນສັງກັດຢູ່ຝ່າຍຊ້າຍຂອງພັກສັງຄົມນິຍົມຝະລັ່ງ. ນັບຕັ້ງແຕ່ລະດູຮ້ອນປີ ໑໙໒໐ ມານັ້ນ ຫງວຽນ ໄດ້ຕັດສິນໃຈ ເຂົ້າເປັນຝ່າຍສະໜັບສະໜູນ ສາກົນກອມມູນິດ ແລະ ເປັນຝ່າຍຂອງ ລັດທິເລນິນ ຢ່າງມີສະຕິຕື່ນຕົວ. ໃນສອງວັນຕິດໆກັນ ຄື ວັນທີ ໑໖ ແລະ ໑໗ ເດືອນ ກໍລະກົດ ໜັງສືພິມ "ຊູຍມານິເຕ" ໄດ້ລົງ "ຮ່າງຂໍ້ວິນິດໄສເບື້ອງຕົ້ນກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນ" ຊຶ່ງເປັນບົດຄວາມທີ່ເລນິນຂຽນໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີສອງຂອງສາກົນທີ ມີ ອັນເປັນບົດຄວາມບົດທຳອິດຂອງເລນິນທີ່ຫງວຽນໄດ້ຮູ້ຈັກ. ເພິ່ນນັ່ງຄົ້ນຄ້ວາ ບົດຄວາມຂອງເລນິນຢ່າງລະອຽດຈົນເດິກດື່ນທ່ຽງຄືນ. ເພິ່ນຈັບໃຈນຳແນວຄິດ ອັນຫລັກແຫລມ, ຍິ່ງໃຫຍ່ ແລະ ເຂົ້າໃຈໄດ້ງ່າຍດາຍຂອງເລນິນ. ເພິ່ນອ່ານບາງຂໍ້ຄວາມຊ້ຳແລ້ວ ຊ້ຳອີກ ດ້ວຍຄວາມພໍໃຈວ່າ "ຂໍ້ສຳຄັນອັນດັບໜຶ່ງ ໃນນະໂຍບາຍຂອງອົງການ ກອມມູນິດສາກົນກ່ຽວກັບບັນຫາຊົນຊາດ ແລະ ບັນຫາເມືອງຂຶ້ນນັ້ນກໍ່ແມ່ນເຮັດໃຫ້ ຊາວກຳມາຊີບ ແລະ ມະຫາຊົນຜູ້ອອກແຮງງານຂອງປະຊາຊາດທັງໝົດ ແລະ ທຸກໆປະເທດຫຍັບເຂົ້າຫາກັນ ໃນການຕໍ່ສູ້ປະຕິວັດຮ່ວມກັນ ເພື່ອໂຄ່ນລົ້ມພວກເຈົ້າທີ່ດິນ ແລະ ອິນຊູັນນາຍທຶນ, ເພາະວ່າມີແຕ່ການຫຍັບເຂົ້າຫາກັນຄືແນວນັ້ນ ຈຶ່ງຈະຮັບປະກັນວ່າ ໄຊຊະນະເໜືອລັດທິທຶນນິຍົມເປັນສິ່ງທີ່ເປັນໄປໄດ້,ຖ້າບໍ່ມີໄຊຊະນະດັ່ງກ່າວ ກໍ່ບໍ່ອາດດັບສູນແອກກົດຂີ່ຊົນຊາດ ແລະ ຄວາມບໍ່ຍຸດຕິທຳ" *.

ນັບວ່າເປັນຄັ້ງທຳອິດໃນຊີວິດ ທີ່ຫງວຽນໄດ້ອ່ານຂໍ້ຄວາມທີ່ມີພະລັງດູດດຶງພິດທຳມະດາ ແຕ່ຊ້ຳພັດລະອຽດທີ່ສຸດ, ຄ້າຍຄືວ່າມັນພົວພັນໄປເຖິງປະເທດຊາດຕົນອີກ, ໃນຂໍ້ຄວາມເຫລົ່ານັ້ນເວົ້າເຖິງຄວາມຈຳເປັນເຕົ້າໂຮມຄວາມພະຍາຍາມຂອງຂະບວນການປະຕິວັດຢູ່ເມືອງແມ່ ແລະ ຢູ່ປະເທດເມືອງຂຶ້ນໃຫ້ເປັນເອກະພາບກັນ ຢ່າງແໜ້ນໜາ

---

* ວ.ອີ.ເລນິນ.ນິພົນຄົບຊຸດ,ເຫລັ້ມ ໔໑, ໜ້າ ໑໖໖.(ເປັນພາສາລັດເຊຍ)

ເວົ້າເຖິງບາງຈຸດພິເສດຂອງຂະບວນການປົດປ່ອຍຢູ່ບັນດາປະເທດເມືອງຂຶ້ນ ແລະ ປະເທດບໍ່ມີເອກະລາດ.ວ.ອີ.ເລນິນ ໄດ້ເນັ້ນຫນັກວ່າ"...ກ່ຽວກັບ ບັນດາປະເທດແລະບັນດາປະຊາຊາດທີ່ຫລ້າຫລັງເຊິ່ງໃນນັ້ນການພົວພັນແບບສັກດີນາຫລືເຈົ້າກົກເຈົ້າເຫລົ່າ ແລະເຈົ້າກົກເຈົ້າເຫລົ່າຊາວນາມີຖານະຄອບຄອງຢູ່ນັ້ນຄວນເອົາໃຈໃສ່ສິ່ງຕໍ່ໄປນີ້ ເປັນພິເສດ:

...ທຸກໆພັກກອມມູນິດຈຳເປັນຕ້ອງຊ່ວຍເຫລືອຂະບວນການປົດປ່ອຍປະຊາທິປະໄຕນາຍທຶນຢູ່ໃນປະເທດເຫລົ່ານີ້; ກຳມະກອນຂອງປະເທດເຈົ້າເມືອງຂຶ້ນ ຕ້ອງເປັນຝ່າຍແບກຫາບພາລະໃຫ້ການຊ່ວຍເຫລືອຢ່າງຫນັກແກ່ປະຊາຊົນປະເທດເມືອງຂຶ້ນທີ່ຫລ້າຫລັງ ແລະ ທີ່ບໍ່ມີເອກະລາດທາງດ້ານການເງິນ"*.

ຫວຽນອ່ານແຕ່ລະປະໂຫຍກຊ້ຳແລ້ວຊ້ຳອີກພະຍາຍາມເຂົ້າໃຈເລິກກວ່ານັ້ນອີກຕໍ່ເນື້ອໃນແນວຄິດຂອງເລນິນ,ເພິ່ນປາບປື້ມໃຈຈົນນ້ຳຕາໄຫລ.ໃນຕະຫລອດເກົ້າປີ ທີ່ເພິ່ນໄປຊອກຫາ"ດາບວິເສດ",ໄປຊອກຫາສັດຈະທຳອັນຍິ່ງໃຫຍ່ທີ່ສຸດທີ່ຈະຊ່ວຍໃຫ້ ສາມາດປົດປ່ອຍປະເທດຫວຽດນາມ. ແລ້ວເພິ່ນກໍຊອກພົບຢູ່ໃນຫລັກທິດສະດີຂອງ ເລນິນເປັນຫລັກທິດສະດີອັນຫນຶ່ງທີ່ປະຕິວັດຢ່າງແທ້ຈິງ,ມີຫລາຍຮູບຫລາຍສີແລະມີລັກສະນະທົ່ວໄປ. ບັນດາຫລັກການພື້ນຖານຂອງຫລັກທິດສະດີນີ້ ລ້ວນແຕ່ໃຫ້ໄດ້ທັງຢູ່ ໃນບັນດາປະເທດນາຍທຶນຂະຫຍາຍຕົວ ທັງຢູ່ບັນດາປະເທດກະສິກຳຫລ້າຫລັງຢູ່ພາກຕາເວັນອອກ.

ຄືນວັນນັ້ນ ຕະກຽງຖືກໄຕ້ແຈ້ງຂຶ້ນຈົນຮອດເດິກດື່ນທ່ຽງຄືນ ຢູ່ໃນຫ້ອງນ້ອຍແຄບໆໃນຕຶກຫລັງຫນຶ່ງຕັ້ງຢູ່ຮ່ອມນ້ອຍໆກົງແປງ. ແສງອະລຸນເປັນສັນຍານທີ່ບໍ່ ພຽງແຕ່ບອກວ່າມື້ໃຫມ່ມາຮອດແລ້ວ ແຕ່ຍັງເປັນສັນຍານບອກວ່າ ໄລຍະໃຫມ່ໃນຊີວິດ ຂອງຫວຽນໄດ້ເລີ່ມຂຶ້ນແລ້ວ. ແນວຄິດຂອງເລນິນໄດ້ເຂົ້າຄອບງຳຈິດໃຈຢ່າງເລິກເຊິ່ງໃນທັນທີທັນໃດໂລດ ແລະ ໂດຍຕະຫລອດການ. ຫລາຍປີຕໍ່ມາ ເມື່ອໄດ້ກາຍມາເປັນ ປະທານປະເທດຫວຽດນາມເອກະລາດ, ສະຫາຍ ໂຮ່ຈິມິນ ຫວນຄືນວ່າ: "ບົດນັ້ນເຂົ້າໃຈຍາກ ຍອມວ່າມີບາງສັບການເມືອງທີ່ ຂ້າພະເຈົ້າບໍ່ເຂົ້າໃຈແຈ້ງ ແຕ່ຂ້າພະເຈົ້າກໍ່ອ່ານຊ້ຳແລ້ວຊ້ຳອີກຫລາຍເທື່ອ ຈົນໃນທີ່ສຸດຂ້າພະເຈົ້າ ຈຶ່ງເຂົ້າໃຈຄວາມຫມາຍ ຂອງມັນເປັນກ້າວໆຢ່າງເລິກເຊິ່ງ. ບົດຄວາມດັ່ງກ່າວເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນ, ອຸ່ນໃຈນອງເຫັນເສັ້ນທາງເຊື່ອຫມັ້ນຢ່າງສຸດໃຈ ! ຂ້າພະເຈົ້າຕື້ນຕັນໃຈ ຈົນຮ້ອງໄຫ້ຢ່າງບໍ່ຮູ້

---

* ວ.ອີ.ເລນິນ.ນິພົນຄົບຊຸດ,ເຫລັ້ມ ໔໑, ຫນ້າ ໑໖໖.(ເປັນພາສາລັດເຊັຍ)

ສຶກຕົວ. ເມື່ອນັ່ງຢູ່ຕາມລຳພັງໃນຫ້ອງຂ້າພະເຈົ້າເວົ້າຂຶ້ນດ້ວຍສຽງດັງຄືວ່າກຳລັງເວົ້າຢູ່ຕໍ່ໜ້າມະຫາຊົນອັນໜາແໜ້ນວ່າ: "ພີ່ນ້ອງຮ່ວມຊາດທີ່ເຄາະຮ້າຍ ແລະທຸກທໍລະມານທັງຫລາຍເອີຍ, ນີ້ລະແມ່ນສິ່ງທີ່ພວກເຮົາຕ້ອງການທີ່ສຸດ,ນີ້ລະແມ່ນເສັ້ນທາງໄປສູ່ການປົດປ່ອຍຂອງພວກເຮົາເອງ".

ຈາກນັ້ນມາ ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈເຂົ້າເປັນຝ່າຍສາກົນທີ ໓ ແລະ ເປັນຝ່າຍເລນິນຢ່າງເດັດດ່ຽວ".

ຫວູງວຽນສົ່ງຈົດໝາຍໄປຫາຄະນະກຳມະການສາກົນທີ ໓ ເພື່ອຂໍເຂົ້າເປັນ ສະມາຊິກຄະນະກຳມະການດັ່ງກ່າວ ແລ້ວເພິ່ນກໍຖືກຮັບເຂົ້າຢູ່ໃນອົງການດັ່ງກ່າວ. ຈາກນັ້ນມາ ໃນບັນດາກອງປະຊຸມຂອງພະແນກຂອງເພິ່ນເອງ, ຫວູງວຽນກາຍເປັນ ໜຶ່ງໃນຈຳນວນນັກປາໄສທີ່ເອົາການເອົາງານທີ່ສຸດຄົນໜຶ່ງ. ເພິ່ນຕຳໜິຝ່າຍທີ່ຕໍ່ຕ້ານ ເລນິນ ແລະ ສາກົນກອມມູນິດຢ່າງເດັດດ່ຽວ. "ຖ້າບັນດາສະຫາຍບໍ່ກ່າວປະນາມລັດທິ ລ່າເມືອງຂຶ້ນ, ຖ້າບັນດາສະຫາຍບໍ່ປ້ອງກັນບັນດາປະຊາຊາດທີ່ຖືກກົດຂີ່ຂູດຮີດນັ້ນແລ້ວ ບັນດາສະຫາຍຈະຖືວ່າຕົນເອງເປັນນັກປະຕິວັດໄດ້ບໍ່?" - ຫວູງວຽນສໍ້ຖາມ ພວກສວຍໂອກາດດ້ວຍຄວາມຄຽດຂຶ້ນ ທ່າມກາງສຽງເນືອງນັນດ້ວຍຄວາມຍິນດີ ແລະ ສຽງຕົບມືສະໜັບສະໜູນຂອງຊາວກຳມະກອນໜຸ່ມ.ເມື່ອໄດ້ເຂົ້າເປັນສະມາຊິກຄະນະກຳມະການສາກົນທີ ໓ ແລ້ວ, ເພິ່ນສະໝັກໃຈເຂົ້າຮ່ວມໃນກອງປະຊຸມຂອງພະແນກອື່ນໆ ເພື່ອປ້ອງກັນທັດສະນະຂອງຕົນເອງຢູ່ນະທີ່ນັ້ນ.

ວັນທີ ໖ ເດືອນສິງຫາ ປີ ໑໙໒໐, ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ ໒ ຂອງສາກົນກອມມູນິດທີ່ມົດສະກູໄດ້ຜ່ານ "ເງື່ອນໄຂ ໒໑ ຂໍ້ ໃນການເຂົ້າຮ່ວມ ສາກົນກອມມູນິດ". ໜັງສືພິມ "ຊຸຍມານິເຕ" ໄດ້ລົງເນື້ອໃນຄົບຖ້ວນຂອງເອກະສານສຳຄັນສະບັບນີ້. ຫວູງວຽນອາຍກວັກ ສົນໃຈເປັນພິເສດໃນຂໍ້ທີ ໘: ທີ່ມີເນື້ອໃນວ່າ "ບັນດາພັກກອມມູນິດຂອງປະເທດທີ່ມີພວກນາຍທຶນເປັນເຈົ້າເມືອງຂຶ້ນ ແລະ ເປັນຜູ້ຂູດຮີດປະຊາຊາດອື່ນ ພັກນັ້ນຕ້ອງວາງແນວທາງອັນຈັດຈານ ແລະ ຈະແຈ້ງທີ່ສຸດ ໂດຍສະເພາະກ່ຽວກັບບັນຫາເມືອງຂຶ້ນ ແລະ ບັນດາປະຊາຊາດທີ່ຖືກກົດຂີ່. ແຕ່ລະພັກທີ່ຢາກຈະເຂົ້າຮ່ວມໃນສາກົນທີ ໓ ນັ້ນ ຕ້ອງເຜີຍແປຢ່າງບໍ່ອິດູກູມາກ່ຽວກັບເລຫລ່ຽມ ຂອງພວກຈັກກະພັດໃນ "ປະເທດຕົນ" ຢູ່ບັນດາປະເທດເມືອງຂຶ້ນ, ສະໜັບສະໜູນ ຂະບວນການປົດປ່ອຍຊາດທຸກໆຂະບວນການ ຢູ່ຕາມບັນດາປະເທດເມືອງຂຶ້ນ ບໍ່ແມ່ນແຕ່

ດ້ວຍຄຳເວົ້າ ແຕ່ຕ້ອງດ້ວຍການກະທຳ ໂດຍເລັ່ງທວງໃຫ້ຂັບໄລ່ພວກຈັກກະພັດຂອງປະເທດຕົນອອກຈາກປະເທດເມືອງຂຶ້ນ, ອົບຮົມສຶກສາກຳມະກອນປະເທດຕົນໃຫ້ມີ ທ່າທີແບບອ້າຍນ້ອງຢ່າງແທ້ຈິງກັບປະຊາຊົນຜູ້ອອກແຮງງານໃນບັນດາປະເທດເມືອງຂຶ້ນແລະບັນດາປະຊາຊາດທີ່ຖືກກົດຂີ່, ພ້ອມດຽວກັນຕ້ອງດຳເນີນການໂຄສະນາຢ່າງເປັນລະບົບຕ້ານພູກການກົດຂີ່ປະຊາຊາດເມືອງຂຶ້ນຢູ່ໃນໝູ່ທະຫານປະເທດຕົນ".

ຄະນະກຳມະການສາກົນທີ 3 ບໍ່ມີສຳນັກງານຖາວອນ, ມື້ນີ້ຢູ່ຫັ້ນ, ມື້ນັ້ນຢູ່ຫີ້, ໂດຍເຊົ່າຫ້ອງຫວ່າງຢູ່ຊຸມນີ້ ຫຼື ຊຸມນັ້ນ. ມີຢູ່ເທື່ອໜຶ່ງ, ຢູ່ທີ່ກອງປະຊຸມ ຊຶ່ງໄຂຂຶ້ນຢູ່ທີ່ຕຶກຂອງສະມາຄົມເຜີຍແຜ່ຄວາມຮູ້ຢູ່ຊຸມລາແຕັງ, ຢູ່ແຈຊຸມແຊັງ-ແຊກແມັງ, ຫງວຽນໄດ້ທຳຄວາມຮູ້ຈັກກັບຄົນຝະລັ່ງໜຸ່ມນ້ອຍຄົນໜຶ່ງ ທີ່ຫາກໍອອກຈາກທະຫານ ຊື່ວ່າ ຊັກ ດູກະໂລ. ຊັກ ດູກະໂລ ມີອາຍຸນ້ອຍກວ່າຫງວຽນເຖິງ ກ ປີ, ແຕ່ເບິ່ງຮູບນອກແລ້ວພັດຄືວ່າ ອາຍຸເທົ່າໆກັນ. ເຊັ່ນດຽວກັນກັບຄົນຫວຽດນາມອື່ນໆແຕ່ລະຄົນ, ດ້ວຍ ຮູບຮ່າງປານກາງ, ບອບບາງ, ຜົມດຳເຫຼື້ອມ, ເມື່ອເບິ່ງຫງວຽນແທ້ໆແລ້ວ ແມ່ນວ່າໜຸ່ມກວ່າອາຍຸຕັ້ງຫຼາຍ. ສອງຄົນມັກພົບກັນເປັນປະຈຳຢູ່ກອງປະຊຸມຂອງຄະນະກຳມະການແລະ ຈາກນັ້ນມາບໍ່ດົນ ພວກເຂົາກໍຜູກມິດສຳພັນກັນ. ສ່ວນຄະນະກຳມະການ ກໍປະຊຸມກັນຈົນຮອດທ່ຽງຄືນຈຶ່ງສຳເລັດເປັນປົກກະຕິ. ເມື່ອເລີກຈາກກອງປະຊຸມ, ສອງສະຫາຍຮັກຕ່າງກໍພາກັນລົງຂີ່ລົດໄຟໃຕ້ດິນປາຣີ ຫຼືບໍ່ ກໍພາກັນຍ່າງຢູ່ໄປຕາມຖະໜົນ ໃນຕອນກາງຄືນ.

ໃນເວລາຕໍ່ມາ ຊັກ ດູກະໂລ ຫວນຄືນວ່າ: "ພວກຂ້ອຍເວົ້າຫຼາຍກ່ຽວກັບ ປະເທດລັດເຊຍໂຊວຽດ ຄາວນັ້ນ ພວກຂ້ອຍມີສ່ວນປະກອບເຂົ້າໃນການຂໍແຜ່ເງິນ ຢູ່ຕາມຖະໜົນຂອງປາຣີ ເພື່ອເອົາມາຊ່ວຍການປະຕິວັດລັດເຊຍບັນເທົາໄພອຶດຫິວ ແລະ ຕໍ່ສູ້ກັບຜົນຮ້າຍອັນເກີດຈາກການທີ່ລັດຖະບານຝະລັ່ງ ແລະ ລັດຖະບານບັນດາປະເທດ ກຸ່ມອັງຕັງປິດລ້ອມປະເທດລັດເຊຍໂຊວຽດ. ວັນໜຶ່ງ ຫຼັງຈາກທີ່ປະຊຸມເລີກແລ້ວ, ພວກເຂົາພາກັນອອກມາຂ້າງນອກ, ຫງວຽນໄດ້ເວົ້ານຳຂ້ອຍວ່າ:

" ນ້ອງຊັກເອີຍ, ການປະຕິວັດລັດເຊຍຕົກຢູ່ໃນອັນຕະລາຍ, ແຕ່ການປະຕິວັດຈະຕີຊະນະສັດຕູທຸກໂຕ. ກ່ອນທີ່ທຶນນິຍົມຈະຖືກພັງທະລາຍໃນຂອບເຂດທົ່ວໂລກນັ້ນ ພວກເຮົາກໍຕ້ອງໄດ້ຜ່ານຜ່າການທົດສອບອັນໜັກໜ່ວງ. ແຕ່ວ່າໄຊຊະນະເດັດຂາດ ຕ້ອງເປັນຂອງພວກເຮົາ".

ເວລານັ້ນ, ຈັກ ດູກໂລ ຫາກໍເລີ່ມການເຄື່ອນໄຫວໃນຖັນແຖວພັກ ດັ່ງນັ້ນ ເຂົາຈຶ່ງມັກຖາມຫງວຽນອາຍກວັກເລື້ອຍໆ ກ່ຽວກັບບາງບັນຫາທີ່ເຂົາເອງຍັງບໍ່ຮູ້ ລະອຽດ. ມີເທື່ອໜຶ່ງ, ເດິກອ້ອນຄືນແລ້ວ, ສອງຄົນນັ່ງຢູ່ໃນຕູ້ລົດໄຟຊັ້ນສອງ ທີ່ເກືອບວ່າຫວ່າງເປົ່າຂອງຂະບວນລົດໄຟໃຕ້ດິນຖ້ຽວສຸດທ້າຍ. ລົດໄຟໃຕ້ດິນປາຣີເວລາໃດກໍມີກິ່ນນ້ຳມັນຈັກ, ກິ່ນຢາງປູທາງໄໝ້. ສຽງກົງລໍ້ລົດດັງສະໜັ່ນ ເຮັດໃຫ້ສອງຄົນນັ້ນບໍ່ໄດ້ຍິນສຽງເວົ້າຂອງກັນ ແລະ ກັນ. ຈັກ ໄດ້ເລົ່າສູ່ຫງວຽນຟັງວ່າ ເມື່ອເວລາໄປຢ້ຽມບ້ານເກີດຢູ່ເຂດ ລູເອ ຕັ້ງຢູ່ຕີນສາຍພູປີເຣເນ, ໂຕເຂົາເອງໄດ້ເຫັນ ຄົນຫວຽດນາມຈຳນວນຫລວງຫລາຍ. ພວກເຂົາເຮັດວຽກຢູ່ໃນໂຮງຊ່າງແສງ, ນອນຢູ່ໃນຕູບໄມ້ອ້ອມຮອບມີແຕ່ທ່ອນເຫລັກເສດ. ຈັກ ຖາມຫງວຽນວ່າ ຊາວຫວຽດນາມຜູ້ເຄາະຮ້າຍເຫລົ່ານັ້ນ ເປັນຫຍັງຈຶ່ງໜີຈາກປະເທດຊາດຂອງຕົນ. ເພື່ອເປັນການຕອບຄຳຖາມ ຫງວຽນ ໄດ້ເລົ່າເລື່ອງອັນເຈັບແສບໃຫ້ຈັກຟັງວ່າ ຄົນຝະລັ່ງຈຳນວນໜຶ່ງ ເຊິ່ງເປັນເພື່ອນຮ່ວມຊາດຂອງຈັກ ໄດ້ດູຖູກຢຽດຫຍາມຊາວຫວຽດນາມເປັນລ້ານໆຄົນ ທີ່ບໍ່ມີສິດອັນພື້ນຖານຫຍັງໝົດ, ໄດ້ຂູດຮີດຊາວຫວຽດນາມຈົນໝົດເນື້ອໝົດຕົວ, ບັງຄັບໃຫ້ ພວກເຂົາເຫລົ່ານີ້ຕິດເຫລົ້າ, ຕິດຝິ່ນ, ຕິດກັນຊາ.

ຈັກຫວນຄືນວ່າ: "ສະເພາະຂ້ອຍແລ້ວ, ນີ້ເປັນເລື່ອງໃໝ່ ທີ່ແປກປະຫລາດ ເພາະວ່າໃນເວລານັ້ນຢູ່ຝະລັ່ງມີຄົນທີ່ຍົກເຫດຜົນວ່າ ນະໂຍບາຍລ່າເມືອງຂຶ້ນ ແມ່ນຮູບການນຳເອົາຄວາມສີວິໄລເຂົ້າໄປໃນບັນດາປະເທດທີ່ຫລ້າຫລັງ. ແຕ່ໄດ້ອາໄສ ຄວາມລຶ້ງເຄີຍກັບຫງວຽນ ຈຶ່ງເຮັດໃຫ້ຂ້ອຍເຂົ້າໃຈຄວາມຈິງກ່ຽວກັບລັດທິລ່າເມືອງຂຶ້ນ ຝະລັ່ງ ".

ແນ່ນອນວ່າຫົວຂໍ້ຕົ້ນຕໍ ຂອງການສົນທະນາກັນລະຫວ່າງສອງຄົນ ຄືບັນຫາທ່າທີຕໍ່ສາກົນກອມມູນິດ. ແມ່ນກະໂຕໃນຊຸມມື້ເຫລົ່ານັ້ນເອງ ບັນດາສະມາຊິກພັກສັງຄົມນິຍົມຜູ້ໜຸ່ມນ້ອຍ ຈຳນວນໜຶ່ງ ທີ່ສະໜັບສະໜູນການເຂົ້າຮ່ວມໃນສາກົນທີ 3 ຄອງຄອຍຟັງໝາກຜົນຈາກການເດີນທາງໄປມົດສະກູ ຂອງ ມາກໄຊ ກາແຊັງ ແລະ ລູຍ ຟຣົດຊາ , ເລຂາທິການໃຫຍ່ພັກສັງຄົມນິຍົມຝະລັ່ງ. ສອງຄົນນີ້ຖືກພັກມອບໜ້າທີ່ໃຫ້ໄປພົບເລນິນ ແລະ ຕິດຕໍ່ກັບອົງການຊີ້ນຳຂອງສາກົນກອມມູນິດ. ເວົ້າສັ້ນໆກໍແມ່ນວ່າ ເພື່ອຊອກຮູ້ພື້ນຖານຕົວຈິງ ເພື່ອວາງທ່າທີຕໍ່ສາກົນກອມມູນິດ.ສອງຄົນນີ້ຈະດຳເນີນວຽກງານອັນສັບສົນທີ່ພັກມອບໃຫ້ໄດ້ສຳເລັດຢ່າງຈົບງາມ ຫລືບໍ່ ບັນຫານີ້ ມີຫລາຍເທື່ອ ໄດ້ກາຍ

ເປັນຫົວຂໍ້ຕົ້ນຕໍໃນການຖົກຖຽງກັນລະຫວ່າງຊັກ ກັບ ຫງວຽນ. ກ່ຽວກັບ ຟຣິດຊາ ນັ້ນ ທັງສອງຄົນມີຄວາມເຫັນຢ່າງເປັນເອກະສັນວ່າ ໃນຖານະຟຣິດຊາ ເປັນນັກເຄື່ອນໄຫວການເມືອງບໍ່ອາດເຊື່ອເພິ່ນຢ່າງເຕັມປ່ຽມ. ແລວກໍ່ເປັນຄວາມຈິງ,ຕໍ່ມາ ຟຣິດຊາ ໄດ້ຂໍລາອອກຈາກພັກກອມມູນິດຝະລັ່ງ ຊຶ່ງເພິ່ນເອງໄດ້ເຂົ້າຮ່ວມໃນການກໍ່ສ້າງ. ສ່ວນກ່ຽວກັບມາກໄຊ ກາແຊັງ ນັ້ນ ການຕີລາຄາຂອງພວກເຂົາເຈົ້າມີບາງອັນແຕກຕ່າງກັນ ຊັກນັ້ນຍັງບໍ່ທັນຮູ້ຈັກກາແຊັງໂດຍສ່ວນຕົວເທື່ອ ເຂົາພຽງແຕ່ໄດ້ຍິນວ່າ ກາແຊັງ ຢູ່ຝ່າຍກາງ. ສ່ວນຫງວຽນອາຍກວັກນັ້ນຮູ້ຈັກ ກາແຊັງເປັນຢ່າງດີ. ເພິ່ນເອງໄດ້ພົບ ກາແຊັງຫລາຍຄັ້ງ ແລະ ຍັງໄດ້ອະທິບາຍໃຫ້ກາແຊັງຮູ້ກ່ຽວກັບສະຖານະການໃນອິນດູຈີນ. ສິ່ງທີ່ເຮັດໃຫ້ເພິ່ນເຊື່ອຖືກາແຊັງແມ່ນຢູ່ບ່ອນວ່າ ແມ່ນແຕ່ ໃນຊຸມນັ້ນທີ່ ກາແຊັງ ສະໜັບສະໜູນຄຳຂວັນ "ເຮັດສົງຄາມຈົນມີໄຊຊະນະ",ກໍ່ຕາມ ແຕ່ກາແຊັງຍັງເປັນຕົວຕັ້ງຕົວຕີຕ້ານລັດທິລ່າເມືອງຂຶ້ນ ແລະ ພົ້ນຮ້າຍຢ່າງອັບອາຍຂາຍໜ້າຂອງມັນ.

ຊັກ ດູກໂລ ໄດ້ເລົ່າຄືນວ່າ: "ຂ້ອຍຈື່ໄດ້ດີວ່າ, ເວລານັ້ນ ຫງວຽນ ຕີລາຄາບົດບາດຂອງກາແຊັງຢູ່ນິດສະກູໄປໃນແງ່ດີກວ່າການສັງເກດຂອງຂ້ອຍ ແລະ ເພິ່ນ ກໍ່ຕີລາຄາຖືກ...ກະທັ່ງເມື່ອເລນິນຕ້ອນຮັບ ກາແຊັງ ແລະ ຟຣິດຊາ ຢູ່ມົດສະກູ, ເລນິນເອງກໍຍັງໄດ້ສັງເກດເຫັນຄວາມແຕກຕ່າງກັນລະຫວ່າງສອງຄົນ ເຖິງແມ່ນວ່າເວລານັ້ນທັງສອງຄົນລ້ວນແຕ່ໄປຕາມແນວທາງ "ເຮັດສົງຄາມຈົນມີໄຊຊະນະ" ຂອງພັກສັງຄົມນິຍົມຝະລັ່ງ. ເລນິນເຫັນວ່າ ກາແຊັງເປັນຄົນໜຶ່ງທີ່ໄດ້ຮັບອິດທິພົນອັນເລິກເຊິ່ງ ຈາກການປະຕິວັດເດືອນຕຸລາ. ໃນສ່ວນເລິກຂອງຈິດໃຈນັ້ນ ເລນິນເຊື່ອກາແຊັງ ແລະ ຄວາມເຊື່ອຂອງເພິ່ນແມ່ນຖືກຕ້ອງ. ເລນິນບໍ່ເອົາຫົວຊານຳຖອຍຄຳຕຳໜິຂອງຄົນ ຈຳນວນໜຶ່ງທີ່ຖືວ່າຕົນເອງເປັນກອມມູນິດ ແລະ ໃຫ້ກາແຊັງເປັນຄົນ "ຝ່າຍກາງ" ທີ່ເຮັດວຽກຫຍັງບໍ່ໄດ້. ຂ້ອຍຢາກເວົ້າວ່າ ເມື່ອຂ້ອຍໂອ້ລົມກັບຫງວຽນອາຍກວັກ, ຂ້ອຍສັງເກດເຫັນວ່າ ຄຳເຫັນຂອງເພິ່ນເກືອບບໍ່ແຕກຕ່າງກັບຄຳເຫັນຂອງເລນິນ".

ເພື່ອນທັງສອງເຫັນວ່າ ຖ້າວ່າ ພັກສັງຄົມນິຍົມຝະລັ່ງຈະເຂົ້າຮ່ວມໃນສາກົນ ທີ 3 ພັກມີຄວາມຈຳເປັນຢ່າງຍິ່ງ ທີ່ຈະຕ້ອງດັດແປງ ຢ່າງເຖິງກົກເຖິງຮາກ ວິທີ ເຮັດວຽກຂອງຕົນ. ຫງວຽນອາຍກວັກ ເວົ້າດ້ວຍຄວາມຂຸ່ນເຄືອງໃຈວ່າ ການປະຊຸມ ຂອງພັກໄດ້ກາຍເປັນເວທີການຜິດຖຽງກັນແບບໄຮ້ປະໂຫຍດ, ສ່ວນມະຕິທີ່ໄດ້ຜ່ານແລ້ວ ແຕ່ບໍ່ເຫັນມີໃຜປະຕິບັດ.

ເພິ່ນເວົ້າກໍ່ຈຸກວ່າ: ພັກປະຕິວັດພັກໜຶ່ງຕ້ອງແມ່ນພັກທີ່ມີລະບຽບວິໄນ. ຫລັງຈາກທີ່ພັກໄດ້ຮັບຮອງເອົາມະຕິໃດໜຶ່ງມາແລ້ວ, ບໍ່ອາດຈະມີສະພາບທີ່ວ່າ ຜູ້ໃດ ຢາກເຮັດແນວໃດກໍ່ໄດ້ ແຕ່ລະຄົນກໍໄປຄົນລະທາງ...ມັນເຖິງເວລາແລ້ວ ທີ່ຈະຕ້ອງ ສ້າງຕັ້ງພັກແບບໃໝ່ພັກໜຶ່ງທີ່ບໍ່ເຮັດວຽກຕາມແບບລັດຖະສະພາ.

ບັດແລ້ວ ກາແຊັງ ແລະ ຟຣົດຊາ ກໍກັບຄືນມາປາຣີ. ໃນວັນທີ ໑໓ ເດືອນສິງຫາ ຄະນະເລຂາທິການພັກສັງຄົມນິຍົມຈັດຕັ້ງການໂຮມຊຸມນຸມມິດຕິງຢູ່ໂຮງກາຍະສິນປາຣີ. ໃຜໆກໍລ້ວນແຕ່ຢາກຢືນຢູ່ໃກ້ຜູ້ກ່າວຄຳປາໄສ, ເວລານັ້ນຍັງບໍ່ມີເຄື່ອງກະຈາຍສຽງ. ກຳມະກອນເປັນພັນໆຄົນນັ່ງ ບຽດສີກັນຢູ່ໃນໂຮງ. ແຕ່ວ່າຄົນມະນຸດຫລັ່ງມາຈາກ ລົດລາງ ແລະ ລົດໄຟໃຕ້ດິນຕື່ມອີກ ສະນັ້ນ, ຄົນຮອດ ໜຶ່ງ ພັນບໍ່ມີບ່ອນນັ່ງໃນໂຮງ ກາຍະສິນ ຈຶ່ງຕ້ອງໄດ້ຢືນເຕັມຢູ່ຕາມທາງເລາະໃກ້ໆນັ້ນ. ສ່ວນຫງວຽນໄດ້ມາຮອດ ອ່າວກ່ອນໝູ່ ຈຶ່ງໄດ້ນັ່ງດີແດ່. ເມື່ອ ກາແຊັງ ປະກົດຕົວແລ້ວ ຫງວຽນພ້ອມດ້ວຍຫຼູກຄົນ ກໍ່ຮ້ອງເພງ "ສາກົນກຳມາຊີບ" ຢ່າງຟົດຟື້ນ ແລະ ເປັ່ງສຽງຮ້ອງ: "ກາແຊັງ ໝັ້ນຍືນ! ເລນິນ ໝັ້ນຍືນ! ສະພາໂຊວຽດໝັ້ນຍືນ!". ກາແຊັງກາວອຶ້ນເທິງເວທີແລ້ວ. ເວົ້າຢ່າງສຸດຈິດສຸດໃຈວ່າ:

"ສຳລັບຂ້າພະເຈົ້າ ທີ່ເປັນນັກສັງຄົມນິຍົມຜູ້ອາວຸໂສຜູ້ໜຶ່ງ ເຊິ່ງຕະຫລອດເວລາ ໜຶ່ງ ປີ ໄຝ່ຝັນຢາກເຫັນສັງຄົມໜຶ່ງທີ່ບໍ່ມີການຂູດຮີດແຮງງານ, ນັບວ່າເປັນໂຊກດີທີ່ມີໂອກາດໄດ້ໄປຢ້ຽມຢາມປະເທດລັດເຊຍ ບ່ອນທີ່ປະຊາຊົນຜູ້ອອກແຮງງານ ກໍາອຳນາດປົກຄອງແລ້ວ. ກວ່າຈະໄດ້ສ້າງຕັ້ງສັງຄົມດີແນວນີ້ ການປະຕິວັດລັດເຊຍກໍຕ້ອງໄດ້ຜ່ານຄວາມທໍລະມານຫລາຍພຽງໃດ ! ພວກເຮົາມີສ່ວນສ້າງຄວາມທໍລະມານ ຕື່ມອີກເພາະວ່າກະໂຕລູກປືນໃຫຍ່ຝະລັ່ງ ໂດຍແມ່ນກຳມະກອນຝະລັ່ງເປັນຜູ້ຜະລິດ ໂດຍແມ່ນກຳມະກອນລົດໄຟ ແລະ ລູກເຮືອຝະລັ່ງສົ່ງໄປນັ້ນພວມສັງຫານທະຫານຂອງປະເທດສາທາລະນະລັດລັດເຊຍໂຊວຽດ...

ປະຊາຊົນຝະລັ່ງ ຈົ່ງສາມັກຄີກັນ! ຈົ່ງຕິດຕາມເບິ່ງວ່າ ພວກຈັກກະພັດ ຝະລັ່ງກຳລັງເຮັດຫຍັງແດ່... ແລະ ຈົ່ງສຳນຶກໃນພັນທະຂອງຕົນເອງ".

ຈາກນັ້ນ ກາແຊັງກໍ່ໄດ້ເວົ້າວ່າ ຜູ້ທີ່ສັງກັດຢູ່ໃນພັກສັງຄົມນິຍົມຝະລັ່ງ ຕ້ອງຖອດຖອນບົດຮຽນຈາກການປະຕິວັດລັດເຊຍ ເພື່ອກະກຽມໃຫ້ແກ່ການສ້າງຕັ້ງ ອຳນາດປົກຄອງກຳມະກອນ-ຊາວນາ ໃນທີ່ວປະເທດຝະລັ່ງ. ເພິ່ນເວົ້າວ່າ ໂດຍແຕກຕ່າງກັບສາ

ກົມທີ 2 ນັ້ນ ສາກົນທີ 3 ກ້າວໄປສູ່ການກະທຳທີ່ຕ້ານລັດທິຈັກກະພັດນິຍົມ ແຫ່ງໂລກ ໂດຍກົງ ແລະ ຢ່າງອາດຫານ. ສາກົນທີ 3 ເປັນຜູ້ເຊື່ອມຈອດບັນດາປະຊາຊາດທີ່ຖືກກົດຂີ່ ແລະ ໃຫ້ການສະໜັບສະໜູນທາງດ້ານຈິດໃຈ ແລະ ວັດຖຸ. ເພິ່ນເວົ້າ ຕື່ມອີກວ່າ ແມ່ນກະໂຕການປະຕິວັດລັດເຊຍ ແລະ ການເຄື່ອນໄຫວຂອງສາກົນທີ 3 ນັ້ນເອງ ເປັນສິ່ງທີ່ກະຕຸກຊຸກຍູ້ ບັນດາປະຊາຊາດທີ່ຕົກເປັນຂ້າທາດໃຫ້ຕື່ນຂຶ້ນ. ປະຈຸບັນແນວຄິດຢາກປົດປ່ອຍໄດ້ປະກົດເປັນຮູບເປັນຮ່າງແລ້ວຢູ່ພາກຕາເວັນອອກເຊັ່ນດຽວກັນ. ຄວາມຫວັງຢາກມີເອກະລາດແຫ່ງຊາດ ແລະ ອິດສະຫລະພາບ ໄດ້ບານແຍ້ມຢູ່ໃນສ່ວນເລິກຂອງຫົວໃຈຂອງຄົນຜູ້ກ້າວໜ້າ.

ພາຍຫລັງກັບຈາກການໄປຢ້ຽມຢາມປະເທດລັດເຊຍແລ້ວ ກາແຊັງ ໄດ້ກາຍເປັນໜຶ່ງໃນບັນດາສະມາຊິກຜູ້ຫ້າວຫັນທີ່ສຸດຂອງຂະບວນການທວງໃຫ້ພັກສັງຄົມນິຍົມ ຝະລັ່ງເຂົ້າຮ່ວມໃນຖັນແຖວສາກົນທີ 3. ເພິ່ນໄດ້ໄປຢ້ຽມຢາມຫລາຍຕົວເມືອງຂອງ ປະເທດຝະລັ່ງ, ໄດ້ເຂົ້າຮ່ວມໃນບັນດາການໂຮມຊຸມນຸມມິດຕິງມັບບໍ່ຖ້ວນຂອງປະຊາຊົນ ຜູ້ອອກແຮງງານ, ໂດຍເຮັດໃຫ້ພວກເຂົາເຊື່ອ ໃນໄຊຊະນະ ຂອງຊາວໂບນເຊວິກ ລັດເຊຍ ແລະ ອະທິບາຍແຈ້ງທາດແທ້ ແຫ່ງບັນດາຫລັກການ ຂອງລັດທິກອມມູນິດ. ການເຄື່ອນໄຫວ ຢ່າງບໍ່ຮູ້ອິດຮູ້ເມື່ອຍຂອງ ກາແຊັງ ໄດ້ມີຜົນໝາກ ອັນຕັດສິນ ແມ່ນຢູ່ບ່ອນວ່າໃນທ້າຍປີ ໑໙໒໐ ນັກສັງຄົມນິຍົມຝະລັ່ງສ່ວນຫລາຍເຫັນດີເຂົ້າຮ່ວມຖັນແຖວສາກົນກອມມູນິດ.

໒

ໃນວັນທີ ໒໕ ເດືອນທັນວາ ປີ ໑໙໒໐, ທ່າມກາງບັນຍາກາດຟົດຟື້ນຂອງມື້ບຸນສະຫລອງພະເຍຊູເກີດ, ກອງປະຊຸມໃຫຍ່ທົ່ວປະເທດຂອງພັກສັງຄົມນິຍົມຝະລັ່ງໄດ້ເປີດຂຶ້ນຢູ່ໃນເມືອງ ຕວກ ຊຶ່ງເປັນເມືອງນ້ອຍແຫ່ງໜຶ່ງທີ່ຕັ້ງຢູ່ໃຈກາງປະເທດຝະລັ່ງ. ໃນຈຳນວນຜູ້ແທນ ໒໑໕ ຄົນ ມີພຽງແຕ່ ທາວຽມອາຍກວັກ ຄົນດຽວເທົ່ານັ້ນທີ່ເປັນຜູ້ຕາງໜ້າຂອງອິນດູຈີນທີ່ເປັນເມືອງຂຶ້ນຝະລັ່ງ. ເພິ່ນຖືກເລືອກຕັ້ງຈາກພະແນກຂອງກົມ ໃຫ້ໄປຮ່ວມ ຍ້ອນວ່າໄດ້ເຮັດວຽກເອົາຈິງເອົາຈັງຢູ່ໃນຄະນະກຳມະການຕໍ່ສູ້ເພື່ອເຂົ້າຮ່ວມ

ໃນສາກົນທີ 3. ກອງປະຊຸມໃຫ້ຖືກຈັດຂຶ້ນຢູ່ໃນໂຮງຝຶກມ້າ ຊຶ່ງໃນເວລານັ້ນຕັ້ງຢູ່ໃກ້ງ ໂບດ ແຊ້ງ ຊຸຍລຽງ ປີ້ນໜ້າໃສ່ແມ່ນ້ຳລົວ ທີ່ກວ້າງໃຫຍ່. ໃນເວລາເກີດ ສົງຄາມໂລກຄັ້ງທີສອງ ອາຄານຫລັງນີ້ຖືກໄຟໄໝ້ ໃນຂັ້ນຖືມລະເບີດ.

ໂຮງເຝິກມ້າຫລັງນີ້ກາຍເປັນເວທີຂອງເຫດການປະຫວັດສາດໜຶ່ງ ຢ່າງຈຳເປັນ, ມັນຖືກບັນດາຫລັກແຫລ່ງອົງຄະນະພັກທ້ອງຖິ່ນທຳການດັດແປງຢ່າງຄ່ອງຮ້ອນ.

ຕາມຮີດຄອງປະເພນີເກົ່າແກ່ຂອງຝະລັ່ງ ທີ່ປະຕິບັດມາຕັ້ງແຕ່ສະໄໝ ເພີ່ມຈິດແຫ່ງມະຫາປະຕິວັດຝະລັ່ງ ບັນດາຜູ້ແທນທີ່ເຂົ້າຮ່ວມປະຊຸມຕ້ອງນັ່ງເປັນຄະນະຕາມຫລັກໝັ້ນການເມືອງຂອງໂຜລາວ. ຢູ່ເບື້ອງຊ້າຍແມ່ນຝ່າຍທີ່ສະໜັບສະໜູນການເຂົ້າຮ່ວມໃນສາກົນກອມມູນິດ, ຢູ່ກາງແມ່ນ "ຝ່າຍນິຍົມລົງເກ" ແລະ "ຝ່າຍທີ່ນິຍົມການຈັດຕັ້ງຄືນໃໝ່" ຊຶ່ງແມ່ນຝ່າຍສະໜັບສະໜູນການປັບປຸງສາກົນທີ 2 ; ຢູ່ເບື້ອງຂວາ ແມ່ນຝ່າຍ ສັງຄົມ-ໂຊແວັງ ຊຶ່ງເປັນຝ່າຍທີ່ຕາມລັດທິ ໂບນເຊວິກ ແລະ ປະເທດລັດເຊຍໂຊວຽດຢ່າງປ່ວງບາ.

ການຖົກຖຽງກັນຢ່າງເຜັດຮ້ອນ ແກ່ຍາວມາໄດ້ ៤ ມື້. ເຖິງແມ່ນວ່າຕອນເລີ່ມຕົ້ນ, ຜູ້ແທນສ່ວນໃຫຍ່ໄດ້ເຫັນດີນຳການທີ່ພັກຈະເຂົ້າຮ່ວມໃນສາກົນກອມມູນິດກໍຕາມ , ແຕ່ການພິຈາລະນາກໍຍັງຄ່ອງຂຶ້ນ. ພວກສັງຄົມ-ໂຊແວັງ ແລະ "ຝ່າຍນິຍົມການຈັດຕັ້ງຄືນໃໝ່ ອ້າງເຫດອ້າງຜົນທຸກໆຢ່າງ ເພື່ອພິກປິ້ນຄວາມໝາຍຂອງເງື່ອນໄຂ ຮັບເອົາເປັນສະມາຊິກຂອງສາກົນກອມມູນິດ ໃສ່ຮ້າຍປ້າຍສີພວກທີ່ເປັນໃຈເຂົ້າຮ່ວມສາກົນກອມມູນິດ ແລະ ກົດດັນບັນດາຜູ້ທີ່ຍັງບໍ່ທັນເຂົ້າໃຈແຈ້ງ ກ່ຽວກັບເປົ້າໝາຍ ແລະ ໜ້າທີ່ຂອງບັນດານັກກອມມູນິດ (ຄົນພວກນີ້ ກິນຈຳນວນບໍ່ໜ້ອຍ).

ຢູ່ໃນສະໄໝປະຊຸມຄັ້ງໜຶ່ງ ທ່າມກາງການພິຈາລະນາຖົກຖຽງກັນຢ່າງຟົດຟື້ນຢູ່ນັ້ນ ປະທານກອງປະຊຸມໄດ້ປະກາດວ່າຜູ້ກ່າວຄຳປາໄສຄົນຕໍ່ໄປແມ່ນ ຫວງວຽນອາຍກວັກ ຜູ້ແທນຈາກອິນດູຈີນ.ທຸກຄົນໃນທີ່ປະຊຸມງຽບເຊີຍຢ່າງສຸດໃຈເມື່ອມອງເຫັນວ່າຢູ່ ກ້ຳຊ້າຍຫ້ອງປະຊຸມມີຊາຍໜຸ່ມຄົງບາງໜ້າຜາກກວ້າງ, ນຸ່ງເຄື່ອງຢ່າງສຸພາບ, ທີ່ຫວງວຽນ ກຽມມາເປັນພິເສດສະເພາະໃນໂອກາດສຳຄັນນີ້. ຫ້ອງປະຊຸມບໍ່ມີເຄື່ອງກະຈາຍສຽງ ຫວງວຽນຈຶ່ງລຸກຢືນເວົ້າກັບທີ່ວ່າ:

" ບັນດາສະຫາຍ, ເຖິງແມ່ນວ່ານີ້ຂ້າພະເຈົ້າພ້ອມດ້ວຍບັນດາສະຫາຍ ຄວນຈະພິຈາລະນາບັນຫາການປະຕິວັດໂລກກໍຕາມ ແຕ່ວ່າຂ້າພະເຈົ້າໃນຖານະເປັນ ສະມາ

ຊິກພັກສັງຄົມນິຍົມ ຂ້າພະເຈົ້າມາທີ່ນີ້ດ້ວຍຄວາມເຈັບປວດຫົວໃຈ ເພື່ອສະແດງການປະທ້ວງຕໍ່ໂທດກຳອັນໂຫດຮ້າຍທີ່ພວກຈັກກະພັດໄດ້ສ້າງຢູ່ເທິງບ້ານເກີດເມືອງນອນ ຂ້າພະເຈົ້າ".

"ຊົມເຊີຍ!" ສຽງສະໜັບສະໜູນດັງກ້ອງຂຶ້ນທົ່ວຫ້ອງປະຊຸມ.

ຫລັງຈາກໄດ້ເລົ່າເລື່ອງຂອງຊາວຫວຽດນາມທີ່ຖືກພວກລ່າເມືອງຂຶ້ນຂູດຮີດ ຈົນໝົດເນື້ອໝົດຕົວ ຖືກກົດຂີ່ ແລະ ດູຖູກດູໝິ່ນ ຫງວຽນກໍ່ຮ້ອງຂຶ້ນວ່າ :

" ບັນດາສະຫາຍ! ປະຊາຊົນຫວຽດນາມທີ່ມີຈຳນວນຫລາຍກວ່າຊາວລ້ານ ຄົນເທົ່າກັບເຄິ່ງໜຶ່ງ ຂອງຈຳນວນປະຊາຊົນ ປະເທດຝະລັ່ງ ພວມຕົກຢູ່ໃນສະພາບ ຄືແນວນີ້ ເຖິງແມ່ນວ່າເຂົາເຈົ້າຖືກເອີ້ນວ່າເປັນຜູ້ທີ່ຢູ່ພາຍໃຕ້ອາລັກຂາຂອງປະເທດ ຝະລັ່ງ ! ພັກສັງຄົມນິຍົມຕ້ອງວາງມາຕະການອັນມີຜົນສັກສິດ ເພື່ອປ້ອງກັນປະຊາຊົນ ປະເທດເມືອງຂຶ້ນທີ່ຖືກກົດຂີ່ຂົ່ມເຫັງ".

ທ່າມກາງສຽງຄະນອງຟົດເດືອດສະໜັບສະໜູນຢູ່ນັ້ນ ຈັງ ລົງເກ ກໍເວົ້າຕັດຄວາມຫງວຽນຢ່າງບໍ່ຄາດຄິດວ່າ:

" ຂ້າພະເຈົ້າກ່າວຄຳປາໄສ ກໍເພື່ອປົກປ້ອງເອົາຊາວພື້ນເມືອງນັ້ນລະ ".

" ກ່ອນທີ່ຂ້າພະເຈົ້າຈະເລີ່ມເວົ້າ ຂ້າພະເຈົ້າຂໍໃຫ້ທຸກຄົນມິດງຽບ". ຄຳຕອບໂຕ້ຂອງຫງວຽນເຮັດໃຫ້ທີ່ປະຊຸມມີຄວາມພໍອົກພໍໃຈ. "ພັກຕ້ອງໂຄສະນາລັດທິ ສັງຄົມນິຍົມຢູ່ໃນບັນດາປະເທດເມືອງຂຶ້ນທັງໝົດ. ຂ້າພະເຈົ້າເຫັນວ່າ ການທີ່ພັກ ສັງຄົມນິຍົມຈະເຂົ້າຮ່ວມໃນຖັນແຖວສາກົນທີ 3 ນັ້ນຍ່ອມມີຄວາມໝາຍວ່າ ພັກໄດ້ໃຫ້ຄຳໝັ້ນ ສັນຍາໃນຕົວຈິງວ່າແຕ່ວັນນີ້ໄປ ພັກຈະຕີລາຄາຄວາມສຳຄັນຂອງບັນຫາເມືອງຂຶ້ນ ຢ່າງຖືກຕ້ອງ.

ຕອນແລງວັນທີ ໒໙ ເດືອນທັນວາ ແມ່ນເວລາຕັດສິນໃນກອງປະຊຸມໃຫຍ່.ກອງປະຊຸມໄດ້ປ່ອນບັດຮັບຮອງເອົາສີ່ມະຕິ. ໃນນັ້ນມີສອງມະຕິສຳຄັນຄື ມະຕິວ່າດ້ວຍ ການເຂົ້າຮ່ວມໃນຖັນແຖວສາກົນທີ 3 ໂດຍແມ່ນ ກາແຊັງ ເປັນຜູ້ຍົກຂຶ້ນ ແລະ ມະຕິ ວ່າດ້ວຍການສ້າງຕັ້ງ "ການຕິດຕໍ່ກັບບັນດາອົງການຈັດຕັ້ງສັງຄົມນິຍົມທັງໝົດ ທີ່ແຍກຕົວອອກຈາກສາກົນທີ 2 " ແລະຄັດຄ້ານເງື່ອນໄຂບາງຂໍ້ໃນຈຳນວນເງື່ອນໄຂ ໒໑ ຂໍ້ໃນການເຂົ້າຮ່ວມໃນຖັນແຖວສາກົນທີ 3 ໂດຍແມ່ນ ລົງເກ ເປັນຜູ້ສະເໜີອອກ. ມະຕິຂອງ ກາແຊັງ ໄດ້ຮັບສຽງສະໜັບສະໜູນ ໗໐% ໃນນັ້ນມີທັງສຽງຂອງ ຫງວຽນອາຍ

ກວັກ.

ເມື່ອປະກາດຜົນຂອງການລົງຄະແນນສຽງ, ທຸກຄົນຮ້ອງເພງສາກົນ ກຳມາຊີບ ກ້ອງກັງວານທົ່ວຫ້ອງປະຊຸມ. ຝ່າຍຂວາ ຮ້ອງຂຶ້ນວ່າ "ໂຊແຣດ ໝັ້ນຍືນ!", ສ່ວນ ຝ່າຍຊ້າຍ ຮ້ອງຕອບຄືນວ່າ "ເລນິນ ແລະ ໂຊແຣດ ໝັ້ນຍືນ !". ຝ່າຍຂວາ ແລະ ຝ່າຍນິຍົມການຈັດຕັ້ງຄືນໃໝ່ ບໍ່ຍອມປະຕິບັດຕາມສຽງສ່ວນຫລາຍ ແລະໄດ້ໜີ ອອກຈາກທີ່ປະຊຸມ. ບັນດາຜູ້ແທນທີ່ເຫລືອຢູ່ ກໍ່ໄດ້ຜ່ານມະຕິສ້າງຕັ້ງພັກກອມມູນິດຝະລັ່ງ ອັນເປັນພະແນກຝະລັ່ງ ໃນສາກົນກອມມູນິດ. ປະທານກອງປະຊຸມ ໄດ້ປະກາດ ຢ່າງ ໑໕ ຄັ້ງຄືນວ່າ:

" ຂ້າພະເຈົ້າ ຂໍອະນຸຍາດປະກາດໄຂກອງປະຊຸມໃຫຍ່ພັກກອມມູນິດຝະລັ່ງ!"

ເວລານັ້ນ ເປັນເວລາ ໔ ໂມງ ໓໐ ນາທີ ຂອງຕອນກາງຄືນ ວັນທີ ໓໐ ເດືອນທັນວາປີ ໑໙໔໐. ນາທີນີ້ໄດ້ກາຍເປັນນາທີປະຫວັດສາດ ທີ່ບໍ່ພຽງແຕ່ສຳລັບຂະ ບວນການກຳມະກອນຝະລັ່ງເທົ່ານັ້ນ, ມັນທັງແມ່ນນາທີທີ່ປະຫາດວ່າພັກກອມມູນິດຫວຽດ ນາມຄົນທຳອິດໄດ້ກຳເນີດຂຶ້ນແລ້ວອີກດ້ວຍ, ທັງປະກາດໃຫ້ຮູ້ວ່າມີຄົນຜູ້ໜຶ່ງຊຶ່ງຢືນຢູ່ໃຕ້ ລັນທຸງລັດທິເລນິນໄດ້ປະກົດຕົວຂຶ້ນຢູ່ໃນຂະບວນການປົດປ່ອຍຊາດຫວຽດນາມ.

ໂດຍເລີ່ມການເຄື່ອນໄຫວປະຕິວັດຂອງຕົນ ໃນຖານະເປັນນັກຮັກຊາດຜູ້ເຮົ່ງກາ ກະຫາຍຢາກປົດປ່ອຍປະເທດຊາດອອກຈາກແອກຂ້າທາດຂອງຕ່າງດ້າວ, ຫວູວຽນອາຍ ກວັກສູ້ຊົນຖາກຖາງທາງໄປຮອດລັດທິເລນິນ, ໄປຮອດແນວຄິດຂອງລັດທິສັງຄົມນິຍົມ ແລະ ລັດທິກອມມູນິດ. ເຊັ່ນດຽວກັບຜູ້ຕາງໜ້າທີ່ກ້າວໜ້າຫລາຍໆຄົນ ຂອງຂະບວນ ການປົດປ່ອຍຊາດຢູ່ຫວຽດນາມ ແລະ ຢູ່ຕາມບັນດາປະເທດ ຝ່າຍຕາເວັນອອກອື່ນໆ ຫວູວຽນອາຍກວັກກາວໄປຫາລັດທິມາກ-ເລນິນ ໂດຍຜ່ານການເຄື່ອນໄຫວປະຕິວັດຢ່າງ ເອົາຈິງເອົາຈັງ ພາຍໃຕ້ລັນທຸງຊາດ-ປະຊາທິປະໄຕ, ພາຍໃຕ້ຄຳຂວັນຕໍ່ສູ້ຕ້ານ ລັດທິ ລ່າເມືອງຂຶ້ນ, ຕ້ານລັດທິຈັກກະພັດ. ຫລາຍປີຕໍ່ມາ ຫວູວຽນອາຍກວັກເລົ່າຄືນວ່າ : "ໃນເບື້ອງຕົ້ນ, ແມ່ນລັດທິຮັກຊາດຂອງຂ້າພະເຈົ້າ ແຕ່ຫາກບໍ່ແມ່ນລັດທິກອມມູນິດ ທີ່ ເປັນສິ່ງທີ່ຊຸກຍູ້ຂ້າພະເຈົ້າໄປຫາລັດທິເລນິນ ໄປຫາສາກົນກອມມູນິດ. ຜ່ານການຕໍ່ສູ້ ນັ້ນເອງ ຂ້າພະເຈົ້າຈຶ່ງຮັບຮູ້ເທື່ອລະກ້າວວ່າ ມີແຕ່ສັງຄົມນິຍົມ ແລະ ລັດທິກອມມູນິດ ເທົ່ານັ້ນ ຈຶ່ງຈະສາມາດປົດປ່ອຍທັງບັນດາປະຊາຊາດທີ່ຖືກກົດຂີ່ ທັງຊາວຜູ້ອອກແຮງ ງານທົ່ວໂລກ ໃຫ້ຫລຸດພົ້ນອອກຈາກສະພາບເປັນຂ້າທາດ. ຂ້າພະເຈົ້າເຂົ້າໃຈວ່າ ລັດ

ທີ່ຮັກຊາດ ແລະ ລັດທິສາກົນກຳມາຊີບຈະຕັດຂາດຈາກກັນບໍ່ໄດ້ເຖິງຂັ້ນໃດ ".

ຜູ້ທີ່ຖະໜອມຮັກປະເທດຊາດຕົນຢ່າງແທ້ຈິງ, ຜູ້ທີ່ຖືວ່າ ຕົນແມ່ນພາກສ່ວນໜຶ່ງຂອງຊາດຕົນ, ຜູ້ທີ່ຕຽມພ້ອມອຸທິດເຫື່ອແຮງທັງໝົດໃຫ້ແກ່ການຕໍ່ສູ້ປົດປ່ອຍຊາດ ແລະ ສັງຄົມຜູ້ນັ້ນຕ້ອງຢຶດໝັ້ນໃນທັດສະນະລັດທິ ມາກ-ເລນິນ ຢ່າງຫລີກລ່ຽງບໍ່ໄດ້ ໃນແຕ່ລະວັນ ແຕ່ລະຊົ່ວໂມງ ປະຫວັດສາດຢັ້ງຢືນໃຫ້ເຫັນເຖິງສັດຈະທຳອັນໜຶ່ງຄື ຕັ້ງແມ່ນຊາວກອມມູນິດນັ້ນເອງທີ່ເປັນຜູ້ ທີ່ປົກປ້ອງຜົນປະໂຫຍດແຫ່ງຊາດ ແລະ ຄວາມມຸ່ງຫວັງຂອງປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ, ເປັນນັກຮົບຜູ້ທີ່ອຸທິດຕົນ ເພື່ອຄວາມເປັນເອກະລາດອັນແທ້ຈິງ ອິດສະຫລະພາບ ແລະ ຄວາມວັດທະນາຖາວອນ ຂອງປະເທດຊາດຕົນ.

24 / VII
ຫ້າມຈຳໜ່າຍ

ຊຸນງານຄວາມດີອັນຍິ່ງໃຫຍ່ລັ້ງທຳອິດຂອງປະທານ ໂຮ ຈິມິນ ແມ່ນຢູ່ບ່ອນວ່າ ເພິ່ນໄດ້ເຊື່ອມຈອດ ຂະບວນການ ປະຕິວັດຫວຽດນາມເຂົ້າກັບ ຂະບວນການກຳມະກອນສາກົນ, ນຳພາປະຊາຊົນຫວຽດນາມເດີນໄປຕາມເສັ້ນທາງ ທີ່ເພິ່ນເອງໄດ້ຜ່ານຜ່າ, ໝາຍຄວາມວ່າ ຈາກລັດທິຮັກຊາດ ໄປສູ່ລັດທິ ມາກ-ເລນິນ.

ເລຢວນ.

໑

"ລັບສະເພາະ. ເຖິງທ່ານ ອານແບ ຊາໂຣ ລັດຖະມົນຕີກະຊວງ ອານານິຄົມ ຝະລັ່ງ, ຈາກຜູ້ກວດກາໃຫຍ່ຂອງກອງທະຫານອິນດູຈີນຢູ່ຝະລັ່ງ. ຂ້າພະເຈົ້າ ຂໍລາຍງານໃຫ້ທ່ານຮູ້ວ່າ: ຄືນກ່ອນ ຂ້າພະເຈົ້າໄດ້ສົນທະນາກັບ ຟານຈູຈິງ.ຫລັງຈາກ ການ

ໂອລົມດັ່ງກ່າວ, ຂ້າພະເຈົ້າຢາກລາຍງານໃຫ້ທ່ານຮູ້ ກ່ຽວກັບສະພາບຕົກອັບຢ່າງຮ້າຍແຮງຂອງ ຟານຈູຈິງ. ເພິ່ນເຈັບໂຊ ດຳລົງຊີວິດຢູ່ຢ່າງຂາດເຂີນ ແລະ ຢາກຂໍກັບຄືນປະເທດ.

ຂ້າພະເຈົ້າເຊື່ອວ່າ ທ່ານໄດ້ຮູ້ຈັກແນວຄິດຂອງຄົນ ອານນາມ ຄົນນີ້ແລ້ວ. ຂ້າພະເຈົ້າຢາກເວົ້າເພີ່ມເຕີມອີກວ່າ ເພິ່ນບໍ່ສັງກັດໃນຈຳນວນບຸກຄົນທີ່ຈະເຮັດໃຫ້ອຳນາດປົກຄອງພວກເຮົາເກີດຄວາມກັງວົນເລີຍ. ຟານຈູຈິງ ເປັນນັກຊາດນິຍົມຜູ້ໜຶ່ງ. ຄວາມຈິງແລ້ວ ເພິ່ນໄດ້ຕັ້ງຄວາມຫວັງໄວ້ວ່າ ຢາກເຫັນປະເທດຊາດຂອງຕົນມີເອກະລາດໃນວັນໜຶ່ງຂ້າງໜ້າ ພ້ອມດຽວກັນນັ້ນ ເພິ່ນກໍເຊື່ອວ່າ ຕ້ອງຮັກສາການອາລັກຂາ ຂອງພວກເຮົາໄວ້ຢູ່ ອານນາມ.

ສິ່ງເຫລົ່ານີ້ ຊີ້ໃຫ້ພວກເຮົາເຫັນວ່າ ແນວຄິດຂອງ ຟານຈູຈິງ ທີ່ຜ່ານ ການກັ່ນຕອງໃນ ໑໐ ປີຢູ່ຝະລັ່ງນັ້ນ ແມ່ນແນວຄິດທີ່ແຕກຕ່າງກັນ ຢ່າງຫລວງຫລາຍກັບແນວຄິດທີ່ເພິ່ນເອງບໍ່ເຫັນພ້ອມນຳ ຂອງຫວອງຽນອາຍກວັກ. ນອກຈາກນັ້ນ ຟານຈູຈິງ ຍັງຕຳໜິ ວິທີເຄື່ອນໄຫວຂອງ ຫວອງຽນອາຍກວັກ ອີກດ້ວຍ.

ໂດຍເຊື່ອໝັ້ນວ່າ ນະໂຍບາຍທີ່ດີທີ່ສຸດໃນເວລານີ້ ແມ່ນສະໜອງຕາມຄຳ ຂໍຮ້ອງຂອງ ຟານຈູຈິງ ນັ້ນ, ສະນັ້ນ ຂ້າພະເຈົ້າຈຶ່ງຂໍສະເໜີທ່ານ ຈົ່ງອະນຸຍາດ ໃຫ້ເພິ່ນກັບຄືນປະເທດ ແລະ ຂໍໃຫ້ອອກຄຳສັ່ງໃຫ້ທະນາຄານອິນດູຈີນອອກຄ່າໃຊ້ຈ່າຍ ໃນການກັບຄືນປະເທດຄັ້ງນີ້".

ພວກທີ່ປົກປ້ອງລະບອບລ່າເມືອງຂຶ້ນຢູ່ອິນດູຈີນນັ້ນ ບໍ່ຫວາດຫວັ່ນ ຟານຈູຈິງ ອີກແລ້ວ. ລັດທິຮັກຊາດຂອງເພິ່ນໃນເມື່ອກ່ອນນີ້ ໄດ້ຖືກໜີບຕົວຈາກແນວຄິດນິຍົມ ຝະລັ່ງ, ຜົນສຸດທ້າຍກໍກາຍເປັນລັດທິຮ່ວມມືແບບປະຖົມປະຖານ. ກ່ອນຈາກຝະລັ່ງ ກັບຄືນປະເທດໃນວັນທີ ໓ເດືອນ ກຸມພາ ປີ ໑໙໒໕, ຟານຈູຈິງ ໄດ້ກ່າວຄຳປາໄສຢູ່ຫ້ອງປະຊຸມຂອງສະມາຄົມວິທະຍາສາດ ປາຣີ. ຢູ່ແຫ່ງນີ້ ເພິ່ນໄດ້ກ່າວແຈ້ງຢ່າງຊື່ກົງ ຕໍ່ທັດສະນະຫລັກໝັ້ນການເມືອງໃໝ່ຂອງຕົນວ່າ:

"ເພື່ອເຮັດໃຫ້ດິນແດນຂອງທະວີບອາຊີ ດຳລົງຄົງຕົວ ແລະ ຂະຫຍາຍຕົວ, ແນ່ນອນວ່າ ພວກຂ້າພະເຈົ້າຕ້ອງການກຳລັງວັດຖຸທີ່ສຸດ ຢ່າງບໍ່ຕ້ອງສົງໄສ ມີແຕ່ ປະເທດຝະລັ່ງ ເທົ່ານັ້ນ ຈຶ່ງຈະຊ່ວຍພວກຂ້າພະເຈົ້າໄດ້ໃນບັນຫານີ້. ປະເທດຝະລັ່ງ ກໍເຊັ່ນດຽວກັນ ຖ້າຢາກຮັກສາອຳນາດຂອງຕົນໄວ້ຢູ່ຕາເວັນອອກໄກນັ້ນ, ຕ້ອງສົນໃຈນຳການ

ຮ່ວມມືກັບປະເທດຫວຽດນາມພວກຂ້າພະເຈົ້າ. ຖ້າວ່າສອງຝ່າຍຫາກຮ່ວມມືກັນກໍຈະບັນລຸເຖິງໝາກສິ່ງໝາກຢ່າງໄດ້, ແຕ່ຖ້າວ່າສອງຝ່າຍຫາກຂັດແຍ່ງກັນ ກໍບໍ່ອາດຈະບັນລຸສິ່ງໃດໝົດ...

ຄຳເວົ້າດັ່ງກ່າວ ມີຄ່າເທົ່າກັບວ່າເພິ່ນໄດ້ລົງນາມໃນການຕັດສິນປະຫານ ຕົນເອງໃນນາມວ່າເປັນຜູ້ນຳຂະບວນການຮັກຊາດ. ບັນດາຜູ້ຮັກຊາດໜຸ່ມນ້ອຍເປັນຄົນທຳອິດທີ່ແນມເຫັນວ່າ ຟານຈູຈິງ ໄດ້ທໍລະຍົດຕໍ່ອຸດົມການຂອງຕົນເອງ, ເຂົາເຈົ້າເຍາະເຍີ້ຍແນວຄິດຮ່ວມມືຂອງເພິ່ນຄື "ການຮ່ວມມືຂອງຄົນຂີ່ມ້າກັບມ້າ".

ຈຳນວນຄົນທີ່ເດີນຕາມ ຟານຈູຈິງ ຍິ່ງລົດນ້ອຍລົງເທົ່າໃດ ຍິ່ງເຮັດໃຫ້ພວກລ່າເມືອງຂຶ້ນຫວາດຫວັ່ນຫລາຍເທົ່ານັ້ນຕໍ່ການເຄື່ອນໄຫວອັນພິລະອາດຫານ ແບບເປີດເຜີຍຂອງ ຫງວຽນອາຍກວັກ ເຊິ່ງເປັນຜູ້ນຳຄົນໃຫມ່ຂອງບັນດາຜູ້ຮັກຊາດຫວຽດນາມ. ພ້ອມກັນກັບບັນດາຫລັກແຫລ່ງອື່ນໆ ນັກກອມມູນິດຜູ້ໜຸ່ມນ້ອຍໄດ້ແຜ່ເງິນ ຢາປົວພະຍາດແລະໂສ້ງເສື້ອຢູ່ຕາມບັນດາຊຸ້ມກຳມະກອນປາຣີ ເພື່ອສະສົມໄວ້ເປັນກ້ອນເງິນຊ່ວຍເຫລືອ - ຊາວຜູ້ອອກແຮງງານ ທີ່ອຶດຫິວຢູ່ປະເທດລັດເຊຍ, ເພິ່ນພະຍາຍາມເຂົ້າຮ່ວມໃນທຸກ ໆ ການໂຮມຊຸມນຸມມິດຕິງຂອງກຳມະກອນ ໂດຍແມ່ນພັກຈັດຕັ້ງຂຶ້ນ, ແລະ ຊຶ່ງຫວງໃຫ້ລັດຖະບານ ຝະລັ່ງ ງົດການປິດລ້ອມດ້ານເສດຖະກິດຕໍ່ປະເທດລັດເຊຍ ໂຊວຽດ ແລະຮັບຮູ້ປະເທດດັ່ງກ່າວທາງດ້ານການທູດ. ຊື່ຂອງເພິ່ນ ມັກປະກົດຢູ່ໃນລາຍຊື່ ຂອງບັນດາຜູ້ກ່າວຄຳປາໄສເປັນປະຈຳຢູ່ຕາມສະໂມສອນການເມືອງ ເພື່ອອະພິປາຍກ່ຽວກັບ ການເມືອງ. ເດິກຂ້ອນຄືນແລ້ວ, ແຕ່ແສງໄຟມົວໆຍັງສິ່ງແສງລອດຜ່ານປ່ອງຢ້ຽມ ເຮືອນເພິ່ນທີ່ຕັ້ງຢູ່ຮ່ອມນ້ອຍໆຂອງຊຸ້ມ ກົງແປງ. ຫງວຽນ ຕ້ອງໄດ້ຂຽນຫລາຍກ່ຽວກັບບັນຫາເມືອງຂຶ້ນ ເພື່ອສົ່ງໄປໃຫ້ໜັງສືພິມພັກ. ຖ້າເປັນວັນອາທິດ ເພິ່ນມັກເຂົ້າ ຫໍສະໝຸດແຫ່ງຊາດ ທີ່ຕັ້ງຢູ່ຖະໜົນ ຣິເຊີລິເອີ. ໂດຍອາໄສຖານະເປັນສະມາຊິກຂອງລັດຖະສະພາ ໄວຢັງ-ກູຕົວຣິເອ ໄດ້ຂໍບັດອ່ານປະຈຳໃຫ້ເພິ່ນໄດ້ເຂົ້າຫໍສະໝຸດແຫ່ງນີ້. ເພິ່ນໄດ້ກາຍເປັນແຂກປະຈຳຂອງຄະນະກຳມະການສູນກາງພັກກອມມູນິດຝະລັ່ງ ຢູ່ຖະໜົນ ລາຟາແຢດ. ເພິ່ນຍັງໄດ້ຖືກແຕ່ງຕັ້ງເປັນກຳມະການໃນຄະນະກຳມາທິການເພື່ອວຽກງານເມືອງຂຶ້ນ ທີ່ຂຶ້ນກັບຄະນະກຳມະການສູນກາງ. ຢູ່ໃນຄະນະກຳມາທິການດັ່ງກ່າວ ເພິ່ນເປັນຫົວໜ້າພະແນກ ອິນດູຈີນ.

ນັບຕັ້ງແຕ່ປີ ໑໙໒໐ ຊາວຜູ້ອອກແຮງງານ ປາຣີ ຖືເປັນປະເພນີວ່າ ໃນໄລຍະ

໑໐ ມື້ສຸດທ້າຍຂອງເດືອນ ພຶດສະພາ ພວກເຂົາເຈົ້າແຫ່ກັນໄປຍັງ ສຸສານ ແປຣ ລາແຊດ ເພື່ອວາງພວງມາລາຢູ່ຕີນ "ອະນຸສາວະລີນັກຮົບກອມມູນ". ຫວວຽນ ເຄີຍໄດ້ມາບ່ອນນີ້ຫລາຍເທື່ອ. ຢູ່ແຫ່ງນີ້ເພິ່ນມີຄວາມຕື້ນຕັນໃຈທີ່ສຸດ ເມື່ອໄດ້ຟັງປາຖົກ ທີ່ຮຽກຮ້ອງໃຫ້ພູກຄົນຈົ່ງລະລຶກເຖິງນັກຮົບກອມມູນ ແລະ ຈົ່ງປະຕິບັດຄຳສັ່ງສອນ ຂອງເຂົາເຈົ້າໃຫ້ເປັນຈິງ. ເພິ່ນກຳກຳປັ້ນແໜ້ນດ້ວຍຄວາມຄຽດແຄ້ນເວລາຍ່າງກາຍ ຫລຸມຝັງສົບຂອງ ເຕັຍຊີເຢ ຊຶ່ງແມ່ນເພັດຊະຄາດຂອງກອມມູນ, ຫລຸມຝັງສົບຂອງເຂົາ ກໍຢູ່ບ່ອນນີ້ ຫ່າງຈາກ "ອະນຸສາວະລີນັກຮົບກອມມູນ" ປະມານສອງສາມຮ້ອຍແມັດ.

ຫວວຽນອາຍກວັກ ຫຸ້ມເທເວລາຫວ່າງທັງໝົດໃຫ້ແກ່ວຽກງານພັກ. ເຖິງແມ່ນວ່າອາຍຸເລີຍ ໖໐ ປີແລ້ວກໍຕາມ ແຕ່ເພິ່ນກໍຍັງບໍ່ທັນໄດ້ສ້າງຄອບຄົວເທື່ອ. ບາງທີກ່ອນຈະຈາກປະເທດມາ, ເພິ່ນໄດ້ປະຄູ່ຮັກໄວ້ຢູ່ບ້ານດອກບົວ ອັນເປັນບ້ານເກີດເມືອງນອນຂອງເພິ່ນ ຊຶ່ງຕາມປະເພນີສັກດີນາຢູ່ຊົນນະບົດຫວຽດນາມ, ສອງຄອບຄົວໄດ້ໝັ້ນ ກັນໄວ້ແຕ່ເວລາສອງຄົນຍັງນ້ອຍພຸ້ນ ເພື່ອວ່າໃຫຍ່ຂຶ້ນມາຈະໄດ້ເປັນຜົວເປັນເມຍກັນ ກໍບໍ່ຈັກ ? ແຕ່ວ່າຈາກມື້ນັ້ນມາຮອດມື້ນີ້ ເວລາໄດ້ຜ່ານຫລາຍປີແລ້ວ. ຄົນໄທບ້ານດຽວຄິດວ່າເພິ່ນຫາຍສາບສູນແລ້ວ. ເຖິງແມ່ນວ່າ ຖ້າວ່າພໍ່ຂອງເພິ່ນໄດ້ໃຫ້ຄຳໝັ້ນສັນຍາ ກັບຄອບຄົວໃຜຜູ້ໜຶ່ງມາແລ້ວກໍຕາມ ຄຳໝັ້ນສັນຍາດັ່ງກ່າວກໍບໍ່ມີຄວາມໝາຍຫຍັງ ເພາະວ່າເວລາໄດ້ຜ່ານໄປແລ້ວ. ສ່ວນວ່າຢູ່ຕ່າງປະເທດນັ້ນ ຈະຊອກຫາເພື່ອນຊີວິດ ອັນເໝາະສົມ ມັນບໍ່ເປັນເລື່ອງງ່າຍໆ. ການເດີນທາງເປັນປະຈຳ ຈາກປະເທດນີ້ໄປຫາປະເທດນັ້ນ, ຊີວິດອັນແສນລຳບາກຍາກແຄ້ນຂອງນັກປະຕິວັດອາຊີບ ແລະ ຫລັກການຮັກສາຄວາມລັບ, ບັນຫາດັ່ງກ່າວ ທັງໝົດນີ້ບັງຄັບໃຫ້ເພິ່ນຕ້ອງໂຈະວຽກສ່ວນຕົວໄວ້.

ເມື່ອເປັນດັ່ງນັ້ນ ເພິ່ນຈຶ່ງບໍ່ມີໂອກາດສ້າງຄອບຄົວໃນເວລາອັນເໝາະສົມແລະດຳລົງຊີວິດເປັນໂສດຕະຫລອດຊີວິດ.

ເມື່ອເວລາເຮັດວຽກຢູ່ຄະນະກຳມາທິການຂອງຄະນະກຳມະການສູນກາງຫວວຽນອາຍກວັກ ມີໂອກາດພົບກັບຊາວໜຸ່ມກ້າວໜ້າຈຳນວນໜຶ່ງ ທີ່ມາຈາກ ບັນດາປະເທດເມືອງຂຶ້ນຂອງຝະລັ່ງຢູ່ເລື້ອຍໆເຊັ່ນ: "ອານເຊຣີ, ຕູຍນີຊີ, ມາດາກາດສະກາ,ມາກຕີນິກແລະ ອື່ນໆ. ແນວຄິດທີ່ຢາກສ້າງຕັ້ງອົງການຈັດຕັ້ງເອກະພາບໜຶ່ງນັ້ນ ມັນຄ່ອຍໆສຸກງອມຢູ່ໃນບັນດາຊາວໜຸ່ມເຫລົ່ານັ້ນ. ໃນເດືອນກໍລະກົດປີ ໑໙໒໑ ເຂົາເຈົ້າໄດ້ປະຊຸມກັນຢູ່ຫ້ອງນອນຂອງຜູ້ໃດຜູ້ໜຶ່ງ ແລະ ໄດ້ຕົກລົງສ້າງຕັ້ງສະຫະພັນປະຊາຊົນ ບັນດາ

ປະເທດເມືອງຂຶ້ນ. ສ່ວນ ຫງວຽນອາຍກວັກ ຖືກເລືອກເຂົ້າຢູ່ໃນຄະນະນຳ. ກົດລະບຽບຂອງສະຫະພັນທີ່ ຫງວຽນອາຍກວັກ ເປັນຜູ້ຮ່າງອອກ ບົ່ງໄວ້ວ່າ ສະຫະພັນມີໜ້າທີ່ເຕົ້າໂຮມບັນດາຜູ້ຕາງໜ້າຂອງບັນດາປະເທດເມືອງຂຶ້ນທີ່ຢູ່ເທິງດິນແດນຝະລັ່ງ, ດຳເນີນວຽກງານໂຄສະນາອົບຂວາຍໃນໝູ່ເຂົາເຈົ້າ, ຊອກຫາວິທີທາງເຕົ້າໂຮມ ພວກເຂົາເຈົ້າເຂົ້າຮ່ວມໃນການຕໍ່ສູ້ລວມ ເພື່ອປົດປ່ອຍຊາດ. ນັບແຕ່ມື້ທຳອິດ ສະຫະພັນ ມີສະມາຊິກຮອດ ໒໐໐ ຄົນ, ໃນນັ້ນມີ ໒ ອົງການຈັດຕັ້ງຄື ສະມາຄົມຊາວ ຫວຽດນາມຜູ້ຮັກຊາດ ແລະ ສະຫະພັນຕໍ່ສູ້ ເພື່ອສິດທິຂອງມະນຸດຂອງມາດາກາດສະກາ.

ໜຶ່ງໃນຈຳນວນສະມາຊິກທີ່ເປັນຫລັກແຫລ່ງຂອງສະຫະພັນ ແລະທັງເປັນເພື່ອນສະໜິດຂອງຫງວຽນອາຍກວັກ ແມ່ນນັກກົດໝາຍ ບະລົງກົວ, ຊາວເກາະ ອັງຕີເຢີ. ຫ້າສິບປີຕໍ່ມາ ນັກກົດໝາຍຄົນນີ້ຫວນຄືນເຖິງວັນເດືອນເຫລົ່ານັ້ນວ່າ: "ຫງວຽນ ໄປປະຊຸມ ແລະ ໄປຮ່ວມການໂຮມຊຸມນຸມມິດຕິງ ຂອງສະຫະພັນຢ່າງເປັນປະຈຳ. ໃນເວລາເຮັດວຽກນຳເພິ່ນ ຂ້າພະເຈົ້າເຊື່ອໝັ້ນວ່າ ເພິ່ນແມ່ນຄົນໜຶ່ງທີ່ຈົງຮັກພັກດີຢ່າງສຸດອົກສຸດໃຈຕໍ່ແນວຄິດຕໍ່ສູ້ເພື່ອປົດປ່ອຍບັນດາປະຊາຊາດ ບັນດາປະເທດເມືອງຂຶ້ນ, ບໍ່ສະເພາະແຕ່ຊາດຫວຽດນາມຂອງເພິ່ນເທົ່ານັ້ນ ແຕ່ຫາກຍັງລວມທັງຫຼາຍປະຊາຊາດ ທີ່ຖືກກົດຂີ່ຢູ່ໃນທົ່ວໂລກອີກດ້ວຍ. ເພິ່ນມີຄວາມເຊື່ອໝັ້ນຢ່າງເລິກເຊິ່ງຕໍ່ໄຊຊະນະສຸດທ້າຍ. ເພິ່ນຍັງຖືວ່າ ຢາກປົດປ່ອຍປະຊາຊາດໄດ້ກໍຕ້ອງເຮັດການປະຕິວັດ ແລະ ບໍ່ມີເສັ້ນທາງອື່ນອີກແລ້ວ. ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ: ຢູ່ໃນໂຕເພິ່ນເອງ ແນວຄິດຕໍ່ສູ້ ປົດປ່ອຍຊາດຍາມໃດກໍຝັງເລິກໃນຈິດສຳນຶກຂອງເພິ່ນ ທັງເປັນສິ່ງທີ່ກຳນົດຊີວິດຂອງເພິ່ນ. ຂ້າພະເຈົ້າຈື່ຈຳໄດ້ວ່າ ມີເທື່ອໜຶ່ງ ເມື່ອຮູ້ວ່າ ພວກລ່າເມືອງຂຶ້ນຝະລັ່ງກຳຣາບ ປາບປາມປະຊາຊົນ ດາໂຮໄມ ຢ່າງປ່າເຖື່ອນ, ເພິ່ນກໍຄຽດແຄ້ນ ສະເທືອນໃຈ ແລະເຈັບແສບທີ່ສຸດ, ຄືວ່າເຫດການດັ່ງກ່າວເກີດຂຶ້ນກັບປະຊາຊົນຂອງເພິ່ນແທ້ໆ. ເພິ່ນ ຄືຄົນໜຶ່ງທີ່ເຕັມໄປດ້ວຍນ້ຳໃຈມະນຸດສະທຳ ແລະ ນ້ຳໃຈສາກົນ".

ຈາກການຮ່ວມງານຢ່າງຕັ້ງໜ້າຢູ່ກັບບັນດາໜັງສືພິມພັກ, ຫງວຽນ ເຂົ້າໃຈແຈ້ງຄວາມໝາຍຂອງໜັງສືພິມທີ່ມີຕໍ່ການໂຄສະນາປະຕິວັດ. ເພິ່ນໄດ້ສະເໜີແນວຄິດທີ່ຢາກສ້າງຕັ້ງໜັງສືພິມສະບັບໜຶ່ງຂອງສະຫະພັນ. ພວກເຂົາຕົກລົງຕັ້ງຊື່ໃຫ້ໜັງສືພິມວ່າ "ປາຣີຢາ". ອີງຕາມຄຳເຫັນຂອງ ຫງວຽນອາຍກວັກ ແລະ ບັນດາເພື່ອນມິດຂອງເພິ່ນຊື່ວ່າ "ປາຣີຢາ" ມັນສະທ້ອນເດັ່ນຊັດເຖິງສະພາບຂອງປະຊາຊາດທີ່ຖືກກົດຂີ່ ແລະ

ຖືກດູໝິ່ນດູຖູກ. ສ່ວນ ຫງວຽນ ເອງເປັນສະມາຊິກສະຫະພັນຜູ້ຕັ້ງໜ້າທີ່ສຸດ ທັງມີບົດຂຽນດ້ານເຣັດໜັງສືພິມ, ດັ່ງນັ້ນເພິ່ນຈຶ່ງຖືກມອບໝາຍໃຫ້ເປັນບັນນາທິການ ແລະພິມຈຳໜ່າຍໜັງສືພິມ.

ຫງວຽນ ພະຍາຍາມຊອກພົບ ອັງຣີ ບາກບຸສ ແລະ ສະເໜີໃຫ້ທ່ານເປັນຜູ້ ຊີປະຖຳໜັງສືພິມ "ປາຣີຢາ". ໃນເວລານັ້ນ ບາກບຸສ ເປັນຜູ້ນຳຂອງສັນນິບາດ ລະຫວ່າງຊາດ "ກລາຣເຕ" ຂອງບັນດານັກປະພັນຜູ້ກ້າວໜ້າ, ສັນນິບາດນີ້ຖືກສ້າງ ຕັ້ງຂຶ້ນໂດຍການລິເລີ່ມຂອງເພິ່ນເອງ. ຜູ້ເຂົ້າຮ່ວມອົງການຈັດຕັ້ງນີ້ມີບັນດານັກເຄື່ອນໄຫວວັນນະຄະດີມີຊື່ສຽງເຊັ່ນ: ອານາໂຕນ ຟະຣັງສ໌, ແບກນາ ໂຊ, ແອບໂຕນ ຊິນກະເລ, ຣາບິນດະຣານາດ ຕາກໍ ແລະ ອື່ນໆ...ບາກບຸສ ຕອບຂໍ້ສະເໜີຂອງ ຫງວຽນດ້ວຍຄວາມເອົາໃຈໃສ່, ທັງໄດ້ແບ່ງຫ້ອງໜຶ່ງຢູ່ໃນຕຶກຂອງຄະນະເລຂາ ສັນນິບາດ "ກລາຣເຕ" ໃຫ້ເປັນທີ່ທຳງານກອງບັນນາທິການຂອງໜັງສືພິມ "ປາຣີຢາ".

ໜັງສືພິມ "ປາຣີຢາ" ສະບັບທຳອິດອອກສູ່ສາຍຕາເພື່ອນນັກອ່ານໃນວັນທີ ໑ ເດືອນເມສາ ປີ ໑໙໒໒. ໜັງສືພິມມີໜ້າດຽວ, ຂະໜາດຂອງມັນພໍປານກາງ. ຊື່ໜັງສືພິມຂຽນເປັນສາມພາສາ: ຝະລັ່ງ, ອາຣັບ, ຈີນ ທັງນີ້ກໍເພື່ອເນັ້ນໜັກ ລັກສະນະສາກົນຂອງມັນ. ຢູ່ໃນບົດນຳຂອງກອງບັນນາທິການຕໍ່ຜູ້ອ່ານ ໄດ້ຂຽນວ່າ ໜັງສືພິມນີ້ແມ່ນໜັງສືພິມທຳອິດຖືກຈັດພິມອອກໃນນາມຊາວຜູ້ອອກແຮງງານທຸກໆຄົນຢູ່ຕາມບັນດາປະເທດເມືອງຂຶ້ນຂອງຝະລັ່ງ.

ການພິມເຜີຍແຜ່ໜັງສືພິມ "ປາຣີຢາ" ຮຽກຮ້ອງໃຫ້ຕ້ອງມີໄຫວພິບຫລາຍທີ່ສຸດ. ຂັ້ນຕົ້ນ ຫງວຽນອາຍກວັກ ແລະ ບັນດາສະຫາຍຂອງເພິ່ນໄດ້ສົ່ງໜັງສືພິມໄປອິນດູຈີນ, ໄປບັນດາປະເທດເມືອງຂຶ້ນຢູ່ທະວີບອາຟະລິກາ ແລະ ອິນເດຍຕາເວັນຕົກ ໂດຍທາງໄປສະນີ ໄປຍັງບ່ອນຢູ່ທີ່ແນ່ນອນ. ແຕ່ເມື່ອຮູ້ວ່າ ໜັງສືພິມທຸກສະບັບທີ່ຖືກສົ່ງໄປດ້ວຍວິທີນີ້ຖືກເຈົ້າໜ້າທີ່ຕຳຫລວດທ້ອງຖິ່ນຢຶດເອົາແລ້ວ ພວກເຂົາຈຶ່ງຣີບຟ້າວຕົກລົງກັບ ລູກເຮືອເພື່ອຂໍໃຫ້ເຂົາເຈົ້າສົ່ງໜັງສືພິມຢ່າງລັບໆໃຫ້ໄປຮອດເມືອງທ່າເຮືອຂອງບັນດາປະເທດເມືອງຂຶ້ນຝະລັ່ງ. ຈຳນວນໜຶ່ງ ໄດ້ຖືກແຈກຢາຍໃຫ້ຄົນຫວຽດນາມຜູ້ລີ້ໄພ ແລະກຳມະກອນຫວຽດນາມຢູ່ ປາຣີ. ເຖິງແມ່ນວ່າ ຊາວກຳມະກອນສ່ວນຫລາຍບໍ່ຮູ້ອ່ານ ກໍຕາມ ແຕ່ພວກເຂົາເຈົ້າກໍຊື້ໜັງສືພິມດ້ວຍຄວາມເຕັມໃຈ ທັງນີ້ກໍເປັນຍ້ອນວ່າ ຫງວຽນໄດ້ອະທິບາຍໃຫ້ພວກເຂົາເຈົ້າຟັງວ່າ ໜັງສືພິມໄດ້ຂຽນກ່ຽວກັບການໃຊ້ຄວາມຮຸນແຮງ

ຂອງພວກລ່າເມືອງຂຶ້ນຝະລັ່ງຢູ່ຫວຽດນາມ, ຈາກນັ້ນ ຊາວກຳມະກອນເຫລົ່ານັ້ນ ກໍໄດ້ໄປຫາກຳມະກອນຝະລັ່ງຊ່ວຍອ່ານໃຫ້ພວກເຂົາເຈົ້າຟັງ. ຫນັງສືພິມ "ປາຣີຢາ" ຍັງໄດ້ວາງຂາຍຢູ່ຕາມຮ້ານຂາຍຫນັງສືພິມຂອງພັກກອມມູນິດຝະລັ່ງຢູ່ ປາຣີ. ບ່ອນທີ່ຫງວຽນໄດ້ແຈກຢາຍຫນັງສືພິມໄດ້ຫລາຍກວ່າບ່ອນອື່ນຫມົດ ແມ່ນຢູ່ຕາມບັນດາການໂຮມ ຊຸມນຸມຂອງກຳມະກອນ. ຢູ່ແຫ່ງນີ້ ຫງວຽນ ໄດ້ແຈກຢາຍຫນັງສືພິມຢ່າງງຽບໆໃຫ້ທຸກຄົນຈາກນັ້ນຈຶ່ງກ້າວຂຶ້ນເທິງເວທີ ແລະ ເວົ້າວ່າ:

"ຫນັງສືພິມສະບັບນີ້ໄດ້ເວົ້າໃຫ້ບັນດາເພື່ອນຮູ້ຈັກກ່ຽວກັບການທີ່ພວກ ລ່າເມືອງຂຶ້ນກົດຂີ່ພວກເຮົາຄືແນວໃດ. ຫນັງສືພິມແຈກໃຫ້ລາ ແຕ່ພວກເຮົາກໍຈະຮູ້ບຸນຄຸນ ຢ່າງເລິກເຊິ່ງ ຖ້າວ່າບັນດາເພື່ອນສະຫມັກໃຈຊ່ວຍອຸດຫນູນ ຫນັງສືພິມຈະຫລາຍຫລື ຫນ້ອຍພຽງແຕ່ຫນຶ່ງອັດກໍໄດ້".

ມີຊາວຫວຽດນາມຜູ້ລີ້ໄພຫລາຍຄົນເຫັນອົກເຫັນໃຈ ຕໍ່ການເຄື່ອນໄຫວ ຂອງຫງວຽນອາຍກວັກ ແຕ່ຍັງຄິດຢ້ານການປາບປາມ, ດັ່ງນັ້ນຈຶ່ງລັກສົ່ງເງິນໄປໃຫ້ເພິ່ນ.ມີເທື່ອຫນຶ່ງ ນັກຮຽນຫວຽດນາມຄົນຫນຶ່ງໄດ້ເຂົ້າໃນບ່ອນເຮັດວຽກຂອງບັນນາທິການຫນັງສືພິມ "ປາຣີຢາ". ນັກຮຽນຄົນນັ້ນແມ່ນເບິ່ງອ່ອນໂຕດ້ວຍຄວາມຢ້ານກົວ, ຟ້າວ ວາງເງິນຈຳນວນ ໕ ຟະຣັງ ໄວ້ເທິງຫນ້າໂຕະ ແລ້ວກໍເວົ້າດ້ວຍຄວາມຮີບຮ້ອນວ່າ:"ເງິນຈຳນວນນີ້ເພື່ອສະຫນັບສະຫນູນຫນັງສືພິມ", ຈາກນັ້ນກໍຫາຍຫນ້າໄປ. ຊາວຫນຸ່ມ ຄົນນີ້ແມ່ນລູກຂອງຄົນຫວຽດນາມຮັ່ງມີທີ່ຮ່ວມມືກັບພວກລ່າເມືອງຂຶ້ນຝະລັ່ງ.

ຫງວຽນອາຍກວັກ ບໍ່ພຽງແຕ່ເປັນບັນນາທິການເທົ່ານັ້ນ ແຕ່ຍັງເປັນຜູ້ຂຽນ ບົດສ່ວນໃຫຍ່ລົງໃນຫນັງສືພິມອີກດ້ວຍ. ຫນັງສືພິມໄດ້ພິມຮູບແຕ້ມດ້ວຍສີດຳ ແລະ ຮູບແຕ້ມສຽດສີ ເຊິ່ງເປັນຝີມືຂອງ ຫງວຽນ ເປັນປະຈຳ. ເພິ່ນຕອບໂຕ້ຢ່າງທັນການ ຕໍ່ເຫດການສຳຄັນທີ່ເກີດຂຶ້ນຢູ່ອິນດູຈີນ ແລະ ຢູ່ບັນດາປະເທດເມືອງຂຶ້ນອື່ນໆຂອງຝະລັ່ງ,ເພິ່ນໄດ້ສຽດສີພວກໄມ້ມືຂາຍຊາດທີ່ຮັບໃຊ້ໃຫ້ແກ່ຝະລັ່ງຢ່າງເຈັບແສບທີ່ສຸດ. ຫນັງສືພິມ"ປາຣີຢາ" ໄດ້ກາຍເປັນເວທີໃຫ້ເພິ່ນໄດ້ໂຄສະນາແນວຄິດປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຍ່. ໃນຊ່ວງໄລຍະທີ່ຊົນຊັ້ນນາຍທຶນ ແລະ ພວກນັກຂຽນຮັບຈ້າງ ຂອງພວກເຂົາໃສ່ຮ້າຍປ້າຍສີສາກົນກອມມູນິດໂດຍບິດເບືອນນະໂຍບາຍຂອງອົງການນີ້ ຢ່າງຫຍາບຊ້ານັ້ນ ຫນັງສືພິມ "ປາຣີຢາ" ໄດ້ອອກແຮງປ້ອງກັນອົງການດັ່ງກ່າວນີ້, ຈາກສະບັບນີ້ ຕໍ່ສະບັບຫນ້າ, ຢ່າງອົງອາດກ້າຫານຢູ່ໃນຫນັງສືພິມແຕ່ລະສະບັບ. ຫນັງສືພິມ ຂຽນວ່າ:

"ສາກົນກອມມູນິດ ຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍຕ້ານສົນຕານນັກປຸ້ນສະດົມຂອງຊົນຊັ້ນນາຍທຶນ ຢູ່ຕາມບັນດາປະເທດທັງໝົດໃນທົ່ວໂລກ. ສາກົນກອມມູນິດ ຍັງໄດ້ປະກາດ ຢ່າງເປີດເຜີຍວ່າ ພວກເຂົາເຈົ້າສະໜັບສະໜູນ ແລະ ເຂົ້າຮ່ວມການຕໍ່ສູ້ປົດປ່ອຍຊາດຂອງບັນດາປະເທດເມືອງຂຶ້ນ. ອ້າຍນ້ອງຊາວຜູ້ອອກແຮງງານ ຈຶ່ງສາມັກຄີກັນເຂົ້າ ຈົ່ງຣັດແໜ້ນຖັນແຖວຢູ່ອ້ອມຂ້າງຄັນທຸງຂອງສາກົນກອມມູນິດ. ມີແຕ່ຢືນຢູ່ໃຕ້ຄັນທຸງດັ່ງກ່າວຈຶ່ງຈະສາມາດປົດປ່ອຍຊາວຜູ້ຖືກກົດຂີ່ໄດ້. ເພື່ອກຳແໜ້ນຫລັກທິດສະດີ ຂອງສາກົນກອມມູນິດ ພວກເຮົາຮຽກຮ້ອງມາຍັງບັນດາເພື່ອນມິດ ຈົ່ງຄົ້ນຄ້ວາບັນດາບົດຮຽນຂອງ ກາກ ມາກ. ຍິ່ງກວ່ານັ້ນ ບັນດາເພື່ອນກຳລັງແນມເຫັນແບບຢ່າງອັນສະຫວ່າງແຈ້ງ ດ້ວຍຕາຕົນເອງ ກ່ຽວກັບການປະຕິບັດແນວຄິດຂອງ ມາກ ໃຫ້ເປັນຈິງນັ້ນຄືການກໍ່ສ້າງລະບອບສັງຄົມໃໝ່ອັນໜຶ່ງ ຢູ່ປະເທດໂຊວຽດລັດເຊຍ. ມີແຕ່ລັດທິກອມມູນິດເທົ່ານັ້ນ ຈຶ່ງຈະຊີ້ບອກເສັ້ນທາງປົດປ່ອຍໃຫ້ແກ່ພວກເຮົາ".

ຢູ່ໃນໜ້າໜັງສືພິມ ຫງວຽນອາຍກວັກ ໄດ້ວາງຫລັກໝັ້ນທາງດ້ານ ແນວຄິດ ແລະການເມືອງຂອງຕົນຢ່າງຈັດເຈນ. ທັດສະນະການເມືອງນີ້ ໄດ້ກາຍເປັນ ຮູບຮ່າງ ພາຍຫລັງທີ່ເພິ່ນເຂົ້າຮ່ວມຖັນແຖວພັກກອມມູນິດຝະລັ່ງ ແລະ ໄດ້ຄົ້ນຄ້ວາບັນດາບົດນິພົນ ຂອງ ເລນິນ ແລະ ເອກະສານຕ່າງໆຂອງສາກົນກອມມູນິດ. ເພິ່ນເນັ້ນໜັກວ່າການປະຕິວັດຄືພາລະກິດຂອງມວນຊົນຜູ້ອອກແຮງງານອັນກວ້າງໃຫຍ່ໄພສານທີ່ນອນຢູ່ ກະໂຕປະເທດເມືອງຂຶ້ນ. ມີແຕ່ພັກກອມມູນິດ ທີ່ເປັນພັກຂອງຊົນຊັ້ນກຳມະກອນເທົ່ານັ້ນຈຶ່ງສາມາດນຳພາການຕໍ່ສູ້ປົດປ່ອຍຊາດ ແລະ ນຳພາການຕໍ່ສູ້ດັ່ງກ່າວ ໄປເຖິງໄຊຊະນະຢ່າງເດັດຂາດໄດ້. ນີ້ແມ່ນແນວຄິດອັນໃໝ່ອ່ຽມໃນປະຫວັດສາດການຕໍ່ສູ້ປົດປ່ອຍຂອງປະຊາຊົນຫວຽດນາມ. ໂດຍໄດ້ຮັບການປຸກລະດົມໃຈຈາກແນວຄິດຂອງ ເລນິນ, ນັກກອມມູ-ນິດ ຫວຽດນາມຈຶ່ງໄດ້ຄ່ອຍໆກ້າວໄປເຖິງບ່ອນສະຫລຸບໄດ້ວ່າ ການປະກອບ ແນວຄິດ ມາກ-ເລນິນ ໃຫ້ເປັນຄືອາວຸດຂອງການປະຕິວັດຫວຽດນາມ ແລະ ການສ້າງຕັ້ງ ພັກການເມືອງຂອງຊົນຊັ້ນກຳມະກອນເປັນສິ່ງທີ່ຈຳເປັນຢ່າງຂາດບໍ່ໄດ້.

ໂດຍປະຕິບັດຕາມຄຳສັ່ງຂອງອຳນາດປົກຄອງ ທີ່ບອກໃຫ້ໜັງສືພິມ ເມືອງຂຶ້ນ ເປີດບັ້ນຣົບໂຈມຕີໜັງສືພິມ "ປາຣີຢາ". ໜັງສືພິມສະບັບໜຶ່ງຂອງໄຊງ່ອນໄດ້ລົງບົດໜຶ່ງ ໂດຍເອີ້ນຫງວຽນອາຍກວັກວ່າ "ຄົນທີ່ເຕັ້ນໄປດ້ວຍຄວາມກະຫາຍ". ເມື່ອໄດ້ຮັບໜັງສືພິມສະບັບນີ້ຢູ່ ປາຣີ ພວກສະມາຊິກຄະນະນຳສະຫະພັນໄດ້ເປີດສະໄໝປະຊຸມ

ວິສາມັນ. ຈາກນັ້ນສອງສາມວັນ ຢູ່ເທິງໜ້າໜັງສືພິມທີ່ພິມອອກປົກກະຕິຂອງ "ປາຣີ-ຢາ" ໄດ້ປະກົດບົດຂຽນຂອງຫງວຽນເຖຈວຽນ ຄົນຫວຽດນາມ ຜູ້ລີ້ໄພຢູ່ຝະລັ່ງ. ບົດຂ່າວຂຽນວ່າ:

"ເປັນຄົນເຕັມໄປດ້ວຍຄວາມກະຫາຍເນາະ?" ແມ່ນແລ້ວ, ຫງວຽນອາຍກວັກ ເປັນຄົນຄືແນວນັ້ນແທ້. ແຕ່ວ່າ ຫງວຽນ ກະຫາຍຫຍັງ ? ກະຫາຍຢາກປົດປ່ອຍ ອ້າຍນ້ອງຂອງຕົນ ທີ່ຖືກພວກລ່າເມືອງຂຶ້ນຂູດຣີດຢ່າງໂຫດຣ້າຍສາມານ ແລະ ຕົກຢູ່ໃນ ສະພາບເປັນຂ້າທາດນັ້ນລະບໍ, ດັ່ງນັ້ນຈຶ່ງບໍ່ມີຄວາມກະຫາຍອື່ນໃດຈະປະເສີດກວ່າ ຄວາມກະຫາຍດັ່ງກ່າວ ?

ກອງປະຊຸມໃຫຍ່ຄັ້ງທີສອງຂອງພັກກອມມູນິດຝະລັ່ງ ໄດ້ເປີດຂຶ້ນຢູ່ ມາກໄຊ . ຫງວຽນອາຍກວັກ ຖືກເລືອກຕັ້ງເປັນຜູ້ແທນຂອງກອງປະຊຸມໃຫຍ່ໃນນາມເປັນສະມາຊິກຂອງຄະນະກຳມາທິການເພື່ອວຽກງານເມືອງຂຶ້ນທີ່ຂຶ້ນກັບຄະນະກຳມະການສູນກາງພັກ. ເມື່ອຂີ່ລົດໄຟໄປຮອດ ມາກໄຊ ຫງວຽນອາຍກວັກ ພ້ອມດ້ວຍບັນດາຜູ້ແທນຄົນອື່ນໄດ້ມຸ່ງໜ້າໄປຍັງຕຶກທີ່ຈະເປີດປະຊຸມໃຫຍ່ໂລດ. ນັກສືບສອງຄົນຮ່າງກາຍລ່ຳສັນ ນຸ່ງຫົ່ມແບບທຳມະດາໂດດເຂົ້າມາໃສ່ເພິ່ນຢ່າງກະທັນຫັນ. ຫງວຽນອາຍກວັກ ໂດດຜ່ານປະຕູເຂົ້າໃນເຮືອນໄວປານແມວ, ເຮັດໃຫ້ພວກນັກສືບຕຳຫລວດບໍ່ກ້າໄລ່ຈັບເພິ່ນ ແລະ ຈຳເປັນຕ້ອງຢືນເຝົ້າຍາມຢູ່ຂ້າງນອກ. ກອງປະຊຸມໃຫຍ່ໄດ້ເປີດຂຶ້ນ, ສ່ວນຫງວຽນອາຍກວັກ-ຖືກເລືອກເຂົ້າຢູ່ໃນຄະນະປະທານ.

ເພິ່ນໄດ້ປະກອບຄວາມເຫັນຢູ່ໃນເວລາພິຈາລະນາບັນຫາເມືອງຂຶ້ນ, ໃນຂະນະດຽວກັນໂດຍຕາງໜ້າໃຫ້ຄະນະກຳມາທິການ ເພິ່ນສະເໜີຮ່າງມະຕິວ່າດ້ວຍ "ລັດທິກອມມູນິດ ແລະ ປະເທດເມືອງຂຶ້ນ". ມະຕິສະບັບນີ້ໄດ້ແຕ່ງອອກບົນພື້ນຖານບັນດາຄຳຊີ້ນຳຂອງສາກົນກອມມູນິດ.

ການປະຊຸມໄດ້ສຳເລັດລົງ, ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມເຊັ່ນ ສະມາຊິກສະພາເທດສະບານເມືອງ ມາກໄຊ ແລະ ຜູ້ແທນລັດຖະສະພາ ຕ່າງກໍ້ຫຸ້ມ ຫງວຽນອາຍກວັກ, ແລ້ວກໍພາເພິ່ນເດີນໄປຕາມຖະໜົນຕໍ່ໜ້າຕໍ່ຕາພວກນັກສືບທີ່ກຳລັງຕິດຕາມຢູ່. ມື້ລູນມາ ໜັງສືພິມ "ເພື່ອນປະຊາຊົນ" ໄດ້ຄັດຄ້ານຢ່າງຮຸນແຮງ ຕໍ່ການກະທຳຂອງເຈົ້າໜ້າທີ່ຕຳຫລວດ ມາກໄຊ: "ຊົນຊັ້ນກຳມະກອນຝະລັ່ງ ຈະບໍ່ເມີນເສີຍຕໍ່ການກະທຳເປື້ອນເປິຄ່ຈງຊີ້ ແລະ ເດັດດ່ຽວຄັດຄ້ານ ຖ້າວ່າເຈົ້າໜ້າທີ່ຕຳຫລວດ ຫາກຈັບ

ກູມ ຫວງວຽນອາຍກວັກ ຢ່າງບໍ່ຖືກຕ້ອງຕາມກົດຫມາຍ. ພັກກອມມູນິດຝະລັ່ງ ເປັນເອ-ກະພາບນຳຄຳເວົ້າອັນປະທັບໃຈ, ອັນເຕັມໄປດ້ວຍຄວາມທຸກທໍລະມານ ແລະ ຄວາມຄຽດແຄ້ນຂອງ ຫວງວຽນອາຍກວັກ ທີ່ກ່າວຢູ່ໃນທີ່ປະຊຸມໃຫຍ່ ເພື່ອສະແດງການສະຫນັບສະຫນູນຈີນຊຸ້ນກຳມະກອນຂອງປະເທດເມືອງຂຶ້ນເອງ ຈຶ່ງເປັນຜູ້ໄດ້ຮັບເຄາະຮ້າຍຈາກພວກຈັກກະພັດລ່າເມືອງຂຶ້ນ. ຖ້າພວກເຂົາເຈົ້າບັງຄັບໃຫ້ພວກເຮົາບໍ່ມີປາກ ບໍ່ມີສຽງແລ້ວ ຈົ່ງຈັບຜູ້ທີ່ເຂົ້າຮ່ວມກອງປະຊຸມໃຫຍ່ທັງຫມົດເຂົ້າຄຸກ ລວມທັງສະມາຊິກພັກກອມມູນິດທຸກຄົນ ຫາກບໍ່ແມ່ນແຕ່ຜູ້ແທນ ອານນາມ ຄົນດຽວ".

ເມື່ອຫວງວຽນອາຍກວັກ ກັບມາຮອດປາຣີ ກໍເຫັນເຈົ້າຂອງເຮືອນໃຊ້ຖ້ອຍຄຳຈົ່ມຮ້າຍ, ເພາະວ່າໄລຍະທີ່ເພິ່ນບໍ່ຢູ່ເຮືອນ ພວກເຈົ້າຫນ້າທີ່ຕຳຫລວດໄດ້ເຂົ້າມາຮ້ານຖ່າຍຮູບ. ພວກເຂົາໄດ້ກວດຄົ້ນຫມົດທຸກຂອກທຸກແຈ ແລະ ທັງຂູ່ວ່າຈະເກີດເລື່ອງບໍ່ດີບໍ່ງາມກັບເຈົ້າຂອງຮ້ານຖ່າຍຮູບ ຍ້ອນວ່າເຂົາໄດ້ຈ້າງ "ຄົນທີ່ເປັນກະບົດ". ເຈົ້າຂອງຮ້ານຍັງໄດ້ບອກໃຫ້ເພິ່ນຮູ້ຕື່ມອີກວ່າ ເຈົ້າຫນ້າທີ່ຕຳຫລວດໄດ້ທຳລາຍບັດປະຈຳຕົວຂອງເພິ່ນແລ້ວ, ຕ້ອງໄດ້ເຮັດຫນັງສືແຈ້ງຄືນອີກ ເພື່ອຂໍອາໄສຢູ່ຕໍ່, ຖ້າບໍ່ດັ່ງນັ້ນແລ້ວ ເຈົ້າຂອງຮ້ານຈະບໍ່ສາມາດຕໍ່ສັນຍາຕົກລົງກັບເພິ່ນ.

ກົງກັບສຸພາສິດທີ່ວ່າ ທຸກເທົ່າໃດແຮງຊ້ຳ. ຫລັງຈາກທີ່ໄດ້ຢືນລຽນຄິວສອງສາມຊົ່ວໂມງ ທ່າມກາງຫິມະຕົກຢູ່ ຕໍ່ຫນ້າສະຖານີຕຳຫລວດ ເພື່ອແຈ້ງຄວາມແລ້ວ ຫວງວຽນຊົງຕ້ານທານຄວາມເຢັນບໍ່ໄດ້ ຈົນສັ່ນທົດໆ, ຕໍ່ມາເພິ່ນກໍເປັນອັກເສບທີ່ປອດ. ໃນຂະນະທີ່ນອນປິ່ນປົວພະຍາດຢູ່ໂຮງຫມໍເຈົ້າຂອງຮ້ານພັດດີອົກດີໃຈເມື່ອເຫັນເຫດການ ເກີດຂຶ້ນ "ສົມປະສົງ" ຄືທີ່ຕັ້ງໄວ້ ບັດແລ້ວເຈົ້າຂອງຮ້ານກໍໄດ້ຈ້າງຄົນໃຫມ່ມາແທນເພິ່ນ.

ເຖິງແມ່ນວ່າຂອບເຂດອິດທິພົນຂອງຫນັງສືພິມ "ປາຣີຢາ" ຍັງຖືກຈຳກັດຢູ່ ກໍຕາມ, ແຕ່ທ່າອຽງດ້ານແນວຄິດຂອງຫນັງສືພິມ ກໍຍັງເຮັດໃຫ້ອຳນາດປົກຄອງຝະລັ່ງກະວົນກະວາຍ. ກະຊວງອານານິຄົມ ຖືວ່າຫນັງສືພິມ "ປາຣີຢາ" ເປັນຫນັງສືພິມປະເພດທຳລາຍ ແລະ ຫ້າມຈຳຫນ່າຍຢູ່ຕາມບັນດາປະເທດເມືອງຂຶ້ນ. ຖ້າປະກົດມີຫນັງສືພິມປະເພດດັ່ງກ່າວຢູ່ເທິງກຳປັ່ນເດີນທະເລຂອງຝະລັ່ງ ທີ່ແລ່ນໄປຍັງບັນດາປະເທດເມືອງຂຶ້ນນັ້ນ ຫນັງສືພິມຈະຖືກຍຶດເອົາຢ່າງບໍ່ມີເງື່ອນໄຂໃນທັນທີ.

7*

ໃນຕອນຕົ້ນຂອງປີ ໑໙໒໓ ອານແບ ຊາໂຣ ໄດ້ສົ່ງໂທລະເລກເຖິງ ມ.ລົງ ຂ້າຫລວງໃຫຍ່ຢູ່ອິນດູຈີນ, ໃນນັ້ນແຈ້ງໃຫ້ຮູ້ວ່າ ລັດຖະບານຝະລັ່ງຕັດສິນໃຈ ຈັບກຸມ ຫງວຽນອາຍກວັກ ແລະ ຈະສົ່ງມາຫວຽດນາມ ເພື່ອໃຫ້ຢູ່ໃນການຄວບຄຸມຢ່າງເຄັ່ງຄັດ ຂອງເຈົ້າໜ້າທີ່ຕຳຫລວດທ້ອງຖິ່ນ ຍ້ອນວ່າການເຄື່ອນໄຫວການເມືອງຂອງເພິ່ນຢູ່ ຝະລັ່ງ ມີລັກສະນະເປັນອັນຕະລາຍ. ມ.ລົງ ກໍສົ່ງໂທລະເລກດ່ວນຕອບກັບຄືນມີໃຈຄວາມວ່າ ເຂົາຄັດຄ້ານການຕັດສິນໃຈດັ່ງກ່າວຢ່າງເດັດດ່ຽວ ແລະ ຊີ້ແຈງວ່າ ຫງວຽນອາຍກວັກ ເປັນຄົນໜຶ່ງທີ່ໄດ້ຮັບຄວາມເຊື່ອຖືນັບວັນນັບກວ້າງຂວາງ ໃນໝູ່ປະຊາຊົນຫວຽດນາມ, ສະນັ້ນຄວນໃຫ້ຫງວຽນອາຍກວັກ ດຳລົງຊີວິດ ຢູ່ໃກ້ປະເທດຊາດເທົ່າໃດຍິ່ງຈະມີປະໂຫຍດຫລາຍເທົ່ານັ້ນ.

ວັນໜຶ່ງ, ເວລາ ຫງວຽນອາຍກວັກ ກັບມາຮອດເຮືອນ ດ້ວຍຄວາມອິດເມື່ອຍ ຊຶ່ງເປັນຍາມເດິກດື່ນແລ້ວ, ແມ່ປ້າຜູ້ຍາມປະຕູເຮືອນຕ້ອນຮັບເພິ່ນດ້ວຍທ່າທີສຸພາບອ່ອນນ້ອມຢູ່ປາກປະຕູ.

"ນີ້! ທ່ານຫງວຽນ ເອີຍ, ຊາຕາຂອງທ່ານກຳລັງຂຶ້ນໄດ້ຫັ້ນ", ແມ່ປ້າເວົ້າຄືກັບເວົ້າຫລິ້ນຊຸ້ນລະ ແລະ ຍື່ນຊອງໃຫຍ່ມີກາປະທັບສະເພາະຂອງລັດຖະມົນຕີ. ອັນທີ່ຈິງແລ້ວແມ່ນ ອານແບ ຊາໂຣ ເຊີນເພິ່ນມາພົບ ເພື່ອໂອ້ລົມກັນ.

ດ້ວຍເຫດນີ້, ສອງສາມມື້ຕໍ່ມາ ຫງວຽນ ຈຶ່ງມາທີ່ຖະໜົນ ອູດີໂນ ຢູ່ໃກ້ກັບຕຶກຫລັງໜຶ່ງເກົ່າແກ່, ຝາເຮືອນດຳ ຍ້ອນກາລະເວລາ. ທະຫານຍາມກວດເບິ່ງບັດຂອງເພິ່ນຢ່າງລະອຽດ. ເພິ່ນຍ່າງຜ່ານປະຕູຫລັກ, ຈາກນັ້ນກໍຍ່າງຜ່ານເດີ່ນທີ່ປູດ້ວຍ ຫີນແຮ່. ມີເຈົ້ານາຍທ່າທາງອົງອາດຄົນໜຶ່ງ ທີ່ນຸ່ງເສື້ອຍາມທາງກຸງສີດຳ ໄດ້ເຊີນເພິ່ນໃຫ້ຍ່າງຕາມຫລັງ ແລ້ວພາເຂົ້າໃນຫ້ອງເຮັດວຽກອັນກວ້າງໂອ່ໂຖງ, ພາຍໃນຫ້ອງປະດັບເອ້ດ້ວຍວັດຖຸບູຮານ ແລະ ຂອງທີ່ລະນຶກຕ່າງໆຈາກຕາເວັນອອກ. ຊາຍໄວກາງຄົນ ຜູ້ໜຶ່ງໃສ່ແວ່ນຕາ ແຕ່ເບື້ອງຂວາເບື້ອງດຽວ ຫົວອ່າວລ້ານແດ່ ຍ່າງອອກມາຕ້ອນຮັບ - ເພິ່ນ.

ເປັນເທື່ອທຳອິດ ທີ່ຫງວຽນ ໄດ້ເຫັນຄົນມີອຳນາດຄົນໜຶ່ງຂອງໂລກ, ຄົນຜູ້ນີ້ແມ່ນທ່ານລັດຖະມົນຕີກະຊວງອານານິຄົມຝະລັ່ງ. ສຳລັບ ຫງວຽນ ເອງ ແລະ ສຳລັບຄົນຫວຽດນາມທັງໝົດທີ່ມີແນວຄິດອິດສະຫລະພາບ ບຸກຄົນດັ່ງກ່າວເປັນຕົວແທນ ໃຫ້ແກ່ນະໂຍບາຍເມືອງຂຶ້ນຢ່າງປ່າເຖື່ອນຂອງຝະລັ່ງຢູ່ໃນອິນດູຈີນ. ອຳນາດຂອງບຸກຄົນ ດັ່ງ

ກ່າວແຜ່ລາມໄປຮອດຂົງເຂດກວ້າງໃຫຍ່ໄພສານ ທີ່ມີເນື້ອທີ່ ໔ ລ້ານກິໂລແມັດ ມົນທົນ ແລະ ມີປະຊາຊົນຮອດ ໖໐ ລ້ານຄົນທີ່ປາກ ໔໐ ພາສາຕ່າງກັນ. ໃນຊຸມປີ ໑໙໑໘ – ໑໙໑໙, ອານແບ ຊາໂຣ ເປັນຂ້າຫລວງໃຫຍ່ຂອງຝະລັ່ງຢູ່ອິນດູຈີນ ຊຶ່ງເປັນບ່ອນ ທີ່ເຂົາຖືກຂະໜານນາມວ່າ"ເຜັດຊະຄາດໄຊງ່ອນ" ຍ້ອນຄວາມໂຫດຫ້ຽມ ໃນການປາບປາມຢ່າງປ່າເຖື່ອນທີ່ສຸດຕໍ່ຂະບວນການປົດປ່ອຍຂອງປະຊາຊົນນາມກໍ່. ໃນປຶ້ມ ຊື່ວ່າ "ການຂຸດຄົ້ນບັນດາປະເທດເມືອງຂຶ້ນຂອງຝະລັ່ງ" ຂອງເຂົາ, ຊາໂຣ ສະແດງ ໃຫ້ຜູ້ອ່ານເຫັນວ່າ ເຂົາເປັນຜູ້ປົກປ້ອງຜົນປະໂຫຍດຂອງນາຍທຶນຝະລັ່ງຢ່າງປ່ອງບ້າ.

ຜ່ານຈາກແວ່ນຕາກຳດຽວ, ຊາໂຣ ກໍ່ງຕາແນມເບິ່ງຄົນຫວຽດນາມ ຮູບຮ່າງບອບບາງທີ່ເກືອບວ່ານັ່ງຈົມຢູ່ໃນຕັ່ງນອນຫຸ້ມໜັງ. ດ້ວຍນ້ຳສຽງເຄັ່ງຂຶມຄືສຽງ ນາຍຄູເວົ້າກັບນັກຮຽນ, ຊາໂຣເວົ້າວ່າ:

"ຢູ່ຝະລັ່ງ ປະກົດມີຄົນກະບົດຈຳນວນໜຶ່ງທີ່ທຳການຕິດຕໍ່ກັບພວກ ໂບນເຊວິກຢູ່ລັດເຊຍ. ຈາກລັດເຊຍ ເຂົາເຈົ້າພັດຕິດຕໍ່ກັບ ກວາງຕຸ້ງ ແລ້ວຜ່ານ ກວາງຕຸ້ງ ຕິດຕໍ່ກັບ ອານນາມ. ເຂົາເຈົ້າໃຊ້ເລ່ກົນນ້ຳງເພຄວາມສະຫງົບ ແລະ ຄວາມໝັ້ນຄົງຢູ່ອິນດູຈີນ, ພວກເຂົາເຈົ້າໄດ້ຕ້ານຄົນປະເທດເຈົ້າເມືອງຂຶ້ນ. ປະເທດຝະລັ່ງ ເມືອງແມ່ທີ່ຍິ່ງໃຫຍ່ມີຄວາມເມດຕາປານີຫລາຍທີ່ສຸດ ແຕ່ຈະບໍ່ອົດທົນໄດ້ດົນສຳລັບຄົນທີ່ສ້າງ ຄວາມວຸ້ນວາຍ. ພວກເຮົາມີກຳລັງພຽງພໍ ເພື່ອດັບສູນຄົນຄິດກະບົດທັງຈີ່ງຊີ...ແລ້ວ ຊາໂຣກໍ່ປະກອບທ່າທາງດ້ວຍການກຳມືທັງສອງເບື້ອງແໜ້ນ ແລະ ເຮັດຄືວ່າກຳລັງຫັກວັດຖຸອັນໃດອັນໜຶ່ງທີ່ແຂງສຸດຂີດ. ຂ້າພະເຈົ້ານິຍົມຊົມຊອບຊາວໜຸ່ມທີ່ມີນ້ຳໃຈດີທ່ານ.ມີນ້ຳໃຈດີແມ່ນດີແລ້ວ ແຕ່ຍັງຕ້ອງ ຮູ້ຊີວິດນຳອີກ. ບໍ່ເປັນຫຍັງ ທຸກສິ່ງທຸກຢ່າງ ຜ່ານໄປແລ້ວ. ເວລາໃດທ່ານຢາກໄດ້ຫຍັງຂ້າພະເຈົ້າຕຽມພ້ອມສະເໝີທີ່ຈະຊ່ວຍເຫລືອທ່ານ. ແຕ່ນີ້ໄປ ຫລັງຈາກທີ່ພວກເຮົາໄດ້ຮູ້ຈັກມັກແກວນກັນແລ້ວ ທ່ານບໍ່ຄວນເກງໃຈ ຂ້າພະເຈົ້າ".

ໃນຂະນະທີ່ ຊາໂຣ ກຳລັງເວົ້າຢູ່ນັ້ນ ຫວງວຽນ ລຸກຂຶ້ນແນມເບິ່ງໜ້າ ຊາໂຣ ກົງງແລ້ວກໍ່ເວົ້າຂຶ້ນດ້ວຍສຽງອັນໜັກແໜ້ນວ່າ:

"ຂອບໃຈທ່ານ! ສິ່ງທີ່ສຳຄັນໃນຊີວິດຂອງຂ້າພະເຈົ້າ, ສິ່ງທີ່ຂ້າພະເຈົ້າ ຕ້ອງການທີ່ສຸດ ແມ່ນອິດສະຫລະພາບຂອງເພື່ອນຮ່ວມຊາດຂອງຂ້າພະເຈົ້າ, ເອກະລາດຂອງປະເທດຊາດຂອງຂ້າພະເຈົ້າ ອໍອະນຸຍາດລາເມືອ..."

ເມື່ອອອກນັ້ນຈາກຕຶກສີ່ໝື່ນຂອງກະຊວງອານານິຄົມ ໃນຂະນະທີ່ນັ່ງຢູ່ໃນລົດໄຟໃຕ້ດິນ ເພິ່ນຫົວຍິ້ມຫົວຄິດ: "ເສືອເກົ່າຂອງເມືອງຂຶ້ນຜູ້ນີ້ໄດ້ເດົາຄວາມຄິດ ຂອງເຮົາຖືກລັກປານກຳປັ້ນທຸບດິນຄືແນວໃດ ? ຕັ້ງແມ່ນເສັ້ນທາງນີ້ເອງ ເຮົາຄິດຢາກຈະກັບປະເທດຊາດ".

ໃນການໂອ້ລົມກັນສອງຕໍ່ສອງເປັນເວລາສັ້ນໆ ແຕ່ຫາກເຕັມໄປດ້ວຍຄວາມເຄັ່ງຕຶງສຸດຂີດ ຊຶ່ງຖືກປົກປິດດ້ວຍມາລະຍາດຈາກທັງສອງຝ່າຍນັ້ນ, ຄົນຫງວຽນນາມຮັກຊາດເປັນຜູ້ເອົ້າຊະນະ. ໄຊຊະນະນ້ອຍໆອັນນີ້ຂອງ ຫງວຽນ ຊຶ່ງໃນເວລານັ້ນບໍ່ມີຜູ້ໃດ ຮູ້ນຳເລີຍ ແລະ ຖ້າມີຜູ້ຮູ້ກໍຄົງບໍ່ເຊື່ອວ່າຈະແມ່ນໄຊຊະນະແທ້ໆນອກຈາກເພິ່ນເອງ ໃນຕົວຈິງແລ້ວ ໄຊຊະນະຄັ້ງນີ້ເປັນສິ່ງທີ່ຊີ້ບອກວ່າໃນອະນາຄົດປະຊາຊົນຫວຽດນາມຈະໄດ້ຮັບໄຊຊະນະໃນການຕໍ່ສູ້ຕ້ານພວກຮຸກຮານ. ບາງທີ ສາມສິບປີຕໍ່ຈາກນັ້ນມາ, ໃນເມື່ອກອງທັບສົ່ງນອກຂອງຝະລັ່ງຍອມຈຳນົນຢູ່ ດຽນບຽນຟູ, ອານແບ ຊາໂຣ ຊຶ່ງເວລາ ນີ້ກຳຕຳແໜ່ງສູງຄືເປັນປະທານສະພາສະຫະພັນ ອິນໂດຈີນ ຂອງຝະລັ່ງ, ຄົງຈະ ຈື່ໄດ້ກ່ຽວກັບການພົບພໍ້ກັນເວລາສັ້ນໆກັບຜູ້ເປັນຕົວແທນໃຫ້ແກ່ບັນດາແນວຄິດທີ່ເພິ່ນບໍ່ສາມາດເຂົ້າໃຈໄດ້ນັ້ນ ແຕ່ທີ່ເຂັ້ມແຂງ ແລະ ຕີເອົາໄຊຊະນະທຸກບັ້ນຮົບ.

"ສະຫາຍ ຫງວຽນ, ສະຫາຍ ມານູອິນສະກີ ຜູ້ຕາງໜ້າ ຄະນະບໍລິຫານງານສາກົນກອມມູນິດ ໄດ້ສະເໜີຂໍໃຫ້ຄະນະນຳພັກກອມມູນິດຝະລັ່ງ ສົ່ງສະຫາຍໄປປະເທດລັດເຊຍໂຊວຽດ ເພື່ອເຮັດວຽກຢູ່ສາກົນກອມມູນິດ, ດຽວນີ້ບັນຫານີ້ກໍຖືກຕົກລົງ ເປັນທີ່ຮຽບຮ້ອຍແລ້ວ".

ເມື່ອໄດ້ຍິນພະນັກງານຂອງຄະນະບໍລິຫານງານສູນກາງພັກກອມມູນິດຝະລັ່ງແຈ້ງຂ່າວ ແຕ່ຫງວຽນ ກໍຍັງບໍ່ເຊື່ອຫູຕົນເອງອີກຊ້ຳ. ເປັນໄປໄດ້ຫລືບໍ່ ທີ່ຄວາມໄຝ່ຝັນຂອງເພິ່ນກຳລັງຈະກາຍເປັນຈິງ ແລະ ເພິ່ນເອງຈະໄດ້ເຫັນບ້ານເກີດເມືອງນອນຂອງການປະຕິວັດເດືອນຕຸລາດ້ວຍຕາຕົນເອງ ຈະໄດ້ເຫັນນະຄອນຫລວງ ມົດສະກູ ແລະເລນິນ? ເພິ່ນຈື່ໄດ້ກ່ຽວກັບການພົບພໍ້ກັບ ມານູອິນສະກີ ຢູ່ທີ່ກອງປະຊຸມໃຫຍ່ຄັ້ງທີສາມ ຂອງພັກກອມມູນິດຝະລັ່ງ ຊຶ່ງເປີດປະຊຸມໃນເດືອນຕຸລາປີ ໑໙໒໔ ທີ່ປາຣີ. ໃນນາມເປັນຜູ້ແທນຄົນດຽວຂອງບັນດາປະເທດເມືອງຂຶ້ນ, ຫງວຽນອາຍກົວກ ຈຶ່ງຖືກຄັດເລືອກເຂົ້າຢູ່ ໃນຄະນະປະທານ. ຢູ່ທີ່ນີ້ເອງ ຖືວ່າເປັນເທື່ອທຳອິດໃນຊີວິດຂອງເພິ່ນ ທີ່ໄດ້ທຳ ຄວາມຮູ້ຈັກກັບຄົນໂຊວຽດຄົນໜຶ່ງ. ເຖິງແມ່ນວ່າພວກສວຍໂອກາດ ໂດຍມີ ຟຣົດຊາ ເປັນຕົວ

ໜ້າ ໄດ້ທຳລາຍວຽກງານຂອງກອງປະຊຸມໃຫຍ່ ໂດຍອັດຂວາງກອງປະຊຸມໃຫຍ່ ບໍ່ໃຫ້ຮັບຮອງເອົາມະຕິໃດໆກໍຕາມ, ແຕ່ຫງວຽນອາຍກວັກ ກໍຍັງໄດ້ອ່ານບົດປາໄສສັ້ນໆແລະສະເໜີເອົາບັນຫາເມືອງຂຶ້ນເຂົ້າໃນວາລະຂອງກອງປະຊຸມໃນຖານະເປັນໜຶ່ງ ໃນບັນດາປະເດັນສຳຄັນ. ມານູອິນສະກີ ນິຍົມຊົມຊອບບົດປາໄສອັນເຂັ້ມຂຸ້ນຂອງຜູ້ແທນຫວຽດນາມ. ສະຫາຍທັງຟັງ ທັງງຶກຫົວເຫັນດີ ແລະ ພ້ອມກັນກັບບັນດາຜູ້ແທນທີ່ເຂົ້າ ຮ່ວມກອງປະຊຸມໃຫຍ່ທັງຕົບມືຊົມເຊີຍ ເມື່ອຫງວຽນຈົບຄຳປາໄສດ້ວຍຄວາມເວົ້າດັ່ງຕໍ່ໄປນີ້: "ພາລະໜ້າທີ່ຂອງ ນັກກອມມູນິດທຸກຄົນ ຄືຮັດທຸກສິ່ງທຸກຢ່າງ ເພື່ອປົດປ່ອຍເອົາ ບັນດາປະຊາຊາດເມືອງຂຶ້ນ".

ສອງສາມເດືອນຕໍ່ມາ ເມື່ອຄະນະບໍລິຫານງານສາກົນກອມມູນິດມອບໜ້າທີ່ ໃຫ້ມານູອິນສະກີ ເປັນຜູ້ອ່ານບົດລາຍງານຕົ້ນຕໍກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນ ຕໍ່ກອງປະຊຸມໃຫຍ່ຄັ້ງທີ 5 ຂອງສາກົນກອມມູນິດນັ້ນ ເພິ່ນຍັງຈົດຈຳຊາວໜຸ່ມຫວຽດນາມຜູ້ຫາວຫັນຄົນໜຶ່ງ ຊຶ່ງເພິ່ນໄດ້ຮູ້ຈັກຢູ່ ປາຣີ. ເພິ່ນໄດ້ສະເໜີຄະນະບໍລິຫານງານ ສູນກາງພັກກອມມູນິດຝະລັ່ງ ໃຫ້ສົ່ງສະຫາຍ ຫງວຽນອາຍກວັກ ໄປມົດສະກູ.

ສະໄໝນັ້ນ ການເດີນທາງແຕ່ຝະລັ່ງ ໄປຫາລັດເຊຍ ແມ່ນເລື່ອງ ອັນຕະລາຍສູດຂີດ ຍິ່ງໄປກວ່ານັ້ນສຳລັບຄົນຜູ້ໜຶ່ງທີ່ມາຈາກປະເທດເມືອງຂຶ້ນຂອງຝະລັ່ງ. ກະໂຕ ຫງວຽນ ຈຶ່ງໄດ້ເຂົ້າຮ່ວມຢ່າງລຽນຕິດໃນການໂຮມຊຸມນຸມມິດຕິງ ເພື່ອປະທ້ວງ ເຈົ້າໜ້າທີ່ຕຳຫລວດທີ່ໄດ້ຂ້າຢ່າງທໍລະມານບັນດາສະມາຊິກພັກກອມມູນິດຝະລັ່ງ ທີ່ເດີນທາງໄປລັດເຊຍ ຫລືແຕ່ລັດເຊຍກັບຄືນມາຝະລັ່ງ. ອຳນາດປົກຄອງຝະລັ່ງ ຍັງດຳເນີນການ ດຳເນີນນະໂຍບາຍ ເປັນປໍລະປັກກັບລັດໂຊວຽດ. ເສັ້ນທາງເສັ້ນດຽວ ຕ້ອງຜ່ານປະເທດເຢຍລະມັນ, ເຊິ່ງໃນເວລານັ້ນເປັນປະເທດມະຫາອຳນາດປະເທດດຽວເທົ່ານັ້ນ ທີ່ມີສາຍພົວພັນອັນເປັນປົກກະຕິກັບປະເທດລັດເຊຍໂຊວຽດ.

ກ່ອນອອກເດີນທາງໄປປະເທດ ລັດເຊຍ ຫງວຽນອາຍກວັກ ຕ້ອງໄດ້ສຳເລັດວຽກງານສັບສົນທີ່ສຸດຄືກະກຽມເງື່ອນໄຂອອກຈາກ ປາຣີ ຢ່າງປິດລັບ. ເພິ່ນ ໄດ້ຂຽນບົດຈຳນວນໜຶ່ງສຳລັບໜັງສືພິມ "ປາຣີຢາ" ແລະ ບັນດາໜັງສືພິມພັກຕ່າງໆຂອງຝະລັ່ງ, ທັງນີ້ກໍເພື່ອລົງພິມບົດດັ່ງກ່າວເປັນໄລຍະ ໂດຍຮັດຄືຈັ່ງວ່າເພິ່ນຍັງຢູ່ທີ່ຝະລັ່ງ . ເພື່ອຫລອກລໍ້ພວກນັກສືບທີ່ໃນຍາມໃດກໍຕິດຕາມແຕ່ເພິ່ນ ເພິ່ນໄດ້ດຳລົງຊີວິດ ແບບຄົນລ່ອງລອຍ, ໂດຍສະແດງໃຫ້ເຫັນວ່າເພິ່ນຫ່າງເຫີນຈາກ ການເຄື່ອນໄຫວ ການເມືອງ

ທັງໝົດ. ຕອນເຊົ້າເພິ່ນໄປເຮັດວຽກ, ຕອນບ່າຍເຂົ້າຫໍສະໝຸດ ຫລືເຂົ້າຫໍພິພິທະພັນ, ຕອນຄ່ຳມາໄປເບິ່ງຮູບເງົາ. ໃນທີ່ສຸດພວກນັກສືບກໍເບື່ອຕິດຕາມຮອຍຕີນຂອງເພິ່ນໝົດ ຈາກນັ້ນ ຕໍ່ໄປນີ້ໜ້າຢູ່ຕາມເສັ້ນທາງທີ່ເຄີຍຫຼຽວ ແລະ ຈົນເຖິງຂັ້ນວ່າພວກເຂົາ ລະເລີຍຕໍ່ການຕິດຕາມ.

ມື້ໜຶ່ງໃນຕອນຄ່ຳຂອງເດືອນມິຖຸນານັ້ນ ຫງວຽນ ໄປເບິ່ງຮູບເງົາຮອບສຸດທ້າຍ. ເມື່ອຮູບເງົາສາຍໄປໄດ້ປະມານເຄິ່ງໜຶ່ງ, ເພິ່ນລັກອອກຈາກໂຮງຮູບເງົາທາງ ປະຕູດ້ານຫລັງ ຊຶ່ງເປັນບ່ອນທີ່ເພິ່ນໄດ້ໃສ່ໃຈໄວ້ກ່ອນແລ້ວ. ຈາກນັ້ນເພິ່ນກໍຟ້າວຂຶ້ນລົດ ໄຟໃຕ້ດິນທີ່ແລ່ນໄປຮອດສະຖານີລົດໄຟຢູ່ກ້ຳເໜືອ ປາຣີ. ຢູ່ແຫ່ງນີ້ເອງ, ເພິ່ນໄດ້ນັດພົບກັບສະຫາຍຝະລັ່ງຄົນໜຶ່ງໄວ້ກ່ອນແລ້ວ, ຜູ້ນີ້ລໍຖ້າຢູ່ທີ່ນີ້ພ້ອມດ້ວຍຫີບນ້ອຍໜ່ວຍໜຶ່ງສຳລັບຫງວຽນ.

ຫງວຽນອຳລາປາຣີໄປ ເຖິງວ່າຈະບໍ່ແມ່ນການຈາກໄປຢ່າງບໍ່ມີວັນກັບແຕ່ກໍອາດເປັນໄລຍະເວລາອັນດົນນານສົມຄວນ. ເພິ່ນເອງຕັດສິນໃຈວ່າຈະເອົາປະເທດລັດເຊຍເປັນດ່ານສຸດທ້າຍ ກ່ອນຈະກັບຄືນຫາປະເທດຊາດ. ຕະຫລອດຫົກປີທີ່ເພິ່ນດຳລົງຊີວິດຢູ່ປາຣີ ເປັນຫົກປີທີ່ມີຜົນປະໂຫຍດອັນໃຫຍ່ຫລວງທີ່ສຸດ. ເພິ່ນໄດ້ກາຍເປັນນັກຄອມມູນິດ, ທັງເປັນຜູ້ຍຶດໝັ້ນໃນຫລັກທິດສະດີປະຕິວັດທີ່ຖືກຕ້ອງທີ່ສຸດ, ເຊິ່ງໄດ້ແກ່ລັດທິ ມາກ-ເລນິນ. ເພິ່ນເອງເຄີຍຊອກຫາແລ້ວ ບັດນີ້ເພິ່ນໄດ້ຊອກພົບເສັ້ນທາງປົດປ່ອຍປະຊາຊົນຕົນ ຊຶ່ງເປັນແນວຄິດສະຫວ່າງສະໄຫວທີ່ໄດ້ຊັກຈູງເອົາເພິ່ນເຂົ້າຢູ່ໃນການທ່ອງທ່ຽວ ຕ່າງແດນ. ເພິ່ນໄດ້ຜ່ານໂຮງຮຽນອອກແຮງງານແຫ່ງໜຶ່ງອັນເຕັມໄປດ້ວຍຄວາມທຸກຍາກ-ກາກກຳ, ໄດ້ສຶກສາຮ່ຳຮຽນຫລາຍສິ່ງຫລາຍຢ່າງ, ໄດ້ກຳແໜ້ນຫລັກການຂັ້ນພື້ນຖານຂອງການຕໍ່ສູ້ປະຕິວັດ, ສຸດທ້າຍເພິ່ນກໍກາຍເປັນນັກປະຕິວັດອາຊີບ.

ມີແຕ່ນັກກົດໝາຍ ບະລົງກົວ ຊຶ່ງເປັນເພື່ອນສະໜິດຄົນໜຶ່ງຂອງ ຫງວຽນອາຍກວັກ ເທົ່ານັ້ນທີ່ຮູ້ຈັກເຫດຜົນໃນການເດີນທາງຢ່າງກະທັນຫັນຄັ້ງນີ້. ເພິ່ນໄດ້ປະຈົດໝາຍອຳລາໄວ້ນຳ ບະລົງກົວ ຝາກຫາບັນດາສະຫາຍໃນສະຫະພັນປະຊາຊົນບັນດາປະເທດເມືອງຂຶ້ນ ແລະ ໜັງສືພິມ "ປາຣີຢາ". ເພິ່ນໄດ້ບອກເຂົາເຈົ້າທາງ ຈົດໝາຍວ່າ ເພິ່ນໄດ້ອອກໄປຢູ່ຊົນນະບົດ ເພື່ອພັກຜ່ອນໄລຍະສັ້ນ.

ເພິ່ນຂຽນວ່າ: "ພວກເພື່ອນທີ່ຮັກແພງ! ໄລຍະດົນນານຜ່ານມານີ້ພວກເຮົາໄດ້ເຮັດວຽກຮ່ວມກັນ. ເຖິງແມ່ນວ່າພວກເຮົາແມ່ນຄົນຕ່າງເຊື້ອຊາດ, ຕ່າງປະເທດແລະ

ຕ່າງທັດສະນະຫລັກຫມັ້ນກໍຕາມ, ແຕ່ພວກເຮົາກໍໄດ້ຮັກແພງກັນຄືອ້າຍນ້ອງຮ່ວມ ຊຸທອມ ດຽວ.

ພວກເຮົາທັງຫມົດ ທົນທຸກທໍລະມານ ຍ້ອນຄວາມໂຫດຮ້າຍຂອງລະບອບເມືອງຂຶ້ນ. ພວກເຮົາຕໍ່ສູ້ເພື່ອຊຸດົມຄະຕິດຽວກັນ ເຊິ່ງໄດ້ແກ່ການປົດປ່ອຍເພື່ອນຮ່ວມຊາດພວກເຮົາ ແລະ ຍາດເອົາເອກະລາດມາໃຫ້ປະເທດຊາດພວກເຮົາ. ໃນການຕໍ່ສູ້ດັ່ງກ່າວນີ້ ຝ່າຍຂອງພວກເຮົາບໍ່ໄດ້ຕົກຢູ່ໃນສະພາບຢູ່ໂດດດ່ຽວ ເພາະວ່າມີບັນດາປະຊາຊາດ ໃນທົ່ວໂລກທີ່ໃຫ້ການສະຫນັບສະຫນູນພວກເຮົາ. ສ່ວນວ່ານັກປະຊາທິປະໄຕຝະລັ່ງ ຈຳນວນຫນຶ່ງ ຄົນຝະລັ່ງທີ່ແທ້ຈິງເປັນຝ່າຍຂອງພວກເຮົາເຊັ່ນກັນ.

ວຽກງານລວມຂອງພວກເຮົາຢູ່ໃນສະຫະພັນປະຊາຊົນບັນດາປະເທດ ເມືອງຂຶ້ນ ແລະ ໃນຫນັງສືພິມ "ປາຣີຢາ" ໄດ້ແຕກດອກອອກຜົນອັນຈີບງາມມາແລ້ວ. ມັນໄດ້ເຮັດໃຫ້ປະເທດຝະລັ່ງຮູ້ແຈ້ງສະພາບຂອງພວກມັນຢູ່ທີ່ບັນດາປະເທດເມືອງຂຶ້ນຄືແນວໃດ. ປະເທດຝະລັ່ງ ເຂົ້າໃຈ ແລະ ເຫັນແຈ້ງໂສມຫນ້າອັນແທ້ຈິງຂອງພວກປາສະຫລາມເມືອງຂຶ້ນ ຜູ້ທີ່ໄດ້ສວຍໃຊ້ຊື່ສຽງ ແລະ ກຽດຕິຍົດຂອງປະເທດຝະລັ່ງ ເພື່ອປຸ້ນສະດົມປະເທດເມືອງຂຶ້ນ ແລະ ສ້າງຮັ່ງຊູນມີໃຫ້ແກ່ພວກເຂົາເອງ ວຽກງານຂອງພວກເຮົາ ໄດ້ປະກອບສ່ວນປຸກເພື່ອນຮ່ວມຊາດຂອງພວກເຮົາໃຫ້ຕື່ນຂຶ້ນ, ໃນຂະນະດຽວກັນມັນຍັງ ຊ່ວຍໃຫ້ເພື່ອນຮ່ວມຊາດເຮົາຮູ້ຄວາມຈິງກ່ຽວກັບປະເທດຝະລັ່ງຢ່າງຈະແຈ້ງ ເຊິ່ງເປັນ ປະເທດທີ່ປະກາດຄຳຂວັນເສລີພາບ ສະເຫມີພາບ ແລະ ພະລາດອນພາບ. ແຕ່ພວກເຮົາຍັງຈະຕ້ອງເຮັດຫລາຍກວ່ານັ້ນອີກ. ພວກເຮົາຕ້ອງເຮັດຫຍັງ ?

ບໍ່ຄວນຕັ້ງບັນຫາ ແລະ ແກ້ໄຂບັນຫາດັ່ງກ່າວນີ້ແບບກົນຈັກ. ທຸກສິ່ງທຸກຢ່າງລ້ວນແຕ່ຂຶ້ນກັບສະພາບການຂອງແຕ່ລະຊາດ. ສຳລັບຂ້າພະເຈົ້າເອງ ບັນຫາແມ່ນຈະແຈ້ງທີ່ສຸດ: ຕ້ອງກັບຄືນປະເທດຊາດ ກັບໄປຫາປະຊາຊົນຂອງຂ້າພະເຈົ້າ, ປຸກໃຫ້ເຂົາເຈົ້າຕື່ນຂຶ້ນ, ຈັດຕັ້ງ, ເຕົ້າໂຮມ, ກຽມພ້ອມຕໍ່ສູ້ຍາດເອົາອິດສະຫລະພາບ ແລະ ເອກະລາດ...".

ເພື່ອຫລີກເວັ້ນຈາກການຕົກເປັນເປົ້າສາຍຕາ ຂອງພວກນັກສືບ ຫວງວຽນອາຍກວັກ ໄດ້ນຸ່ງທົ່ມຢ່າງສວຍງາມ ຂີ່ລົດໄຟດ່ວນຂຸນຫນຶ່ງສາຍປາຣີ-ແບັກແລ້ງ. ເພິ່ນໄດ້ທວນຄືນດັ່ງນີ້ "ສູບຢາປະເພດລາຄາແພງ, ໃຊ້ຈ່າຍຄືກັນກັບນັກທຸລະກິດທີ່ຮັ່ງມີ". ຢູ່ແບັກແລ້ງ ມີສະຫາຍ ເຍຍລະມັນຄົນຫນຶ່ງມາຕ້ອນຮັບຫວງວຽນອາຍກວັກ. ຕໍ່ຈາກນັ້ນສະ

ທາຍເຍຍລະມັນຜູ້ນີ້ໄດ້ໄປທີ່ສຳນັກຜູ້ຕາງໜ້າຂອງສະຫະພັນສາທາລະນະລັດສັງຄົມນິຍົມ ໂຊວຽດລັດເຊຍ ແລະ ໄດ້ຂໍໃຫ້ເພື່ອນໂຊວຽດເຮັດໜັງສືເດີນທາງໃຫ້ຜູ້ຕາງໜ້າ ພັກກອມມູນິດຝະລັ່ງ ເຊິ່ງເປັນຄົນອິນດູຈີນ ເພື່ອໄປປະຕິບັດງານ ຢູ່ໃນຄະນະບໍລິຫານງານສາກົນກອມມູນິດ ທີ່ມົດສະກູ. ອີກບໍ່ດົນ ຫງວຽນ ໄດ້ຮັບ "ໜັງສືອະນຸຍາດເຂົ້າເມືອງ" ໂດຍໃສ່ຊື່ວ່າ ແຈນວາງ, ນັກຖ່າຍຮູບທີ່ທ່ອງທ່ຽວ ໜັງສືດັ່ງກ່າວແມ່ນຜູ້ຕາງໜ້າ ທີ່ມີອຳນາດເຕັມແຫ່ງສະຫະພັນ ສາທາລະນະລັດ ສັງຄົມນິຍົມ ໂຊວຽດ ລັດເຊຍປະຈຳ ຢູ່ເຍຍລະມັນເປັນຜູ້ອອກໃຫ້. ສອງສາມມື້ຕໍ່ມາ ຫງວຽນອາຍກວັກ ກໍ່ອອກເດີນທາງຈາກຮຳບວັກໄປຍັງ ເປໂຕຣກຣາດ ໂດຍກຳປັ່ນໂຊວຽດ "ກາກ ລຽບຄະນຽດ".

ບໍ່ເຂົ້າໃຈວ່າເປັນດ້ວຍເຫດໃດ ຢູ່ໃນບັນດາບົດບັນທຶກປະຫວັດສາດທີ່ຂຽນ ກ່ຽວກັບປະທານໂຮ່ຈີ່ມິນ ຈຶ່ງມັກໃຊ້ສົມມຸດຖານຄືວ່າເພິ່ນໄປຮອດປະເທດລັດເຊຍ ໂຊວຽດ ຄັ້ງທຳອິດໃນປີ ໑໙໒໔. ແຕ່ "ໜັງສືອະນຸຍາດເຂົ້າເມືອງ" ຊຶ່ງແມ່ນຜູ້ຕາງໜ້າ ສະຫະພັນສາທາລະນະລັດ ສັງຄົມນິຍົມ ໂຊວຽດ ລັດເຊຍປະຈຳຢູ່ເຍຍລະມັນເປັນຜູ້ ອອກໜັງສືໃຫ້ເພິ່ນ ໂດຍໃສ່ຊື່ວ່າ ແຈນວາງ ນັ້ນໄດ້ຫັກລ້າງການສົມມຸດຖານດັ່ງກ່າວ. ໜັງສືອະນຸຍາດເຂົ້າເມືອງດັ່ງກ່າວນັ້ນມີກາປະທັບຂອງດ່ານກວດກາໜັງສືຜ່ານແດນ ເຊິ່ງແຈ້ງໃຫ້ຊາບຢ່າງຈັດເຈນເຖິງວັນທີມາຮອດ ເປໂຕຣກຣາດ ຂອງຫງວຽນນັ້ນຄືວັນທີ ໓໐ ເດືອນ ມິຖຸນາ ປີ ໑໙໒໓.

ການທີ່ຫງວຽນອາຍກວັກ ຫາຍສາບສູນ ໄປຈາກປາຣີ ຢ່າງບໍ່ມີຮ່ອງຮອຍປະໄວ້ນັ້ນ ໄດ້ເຮັດໃຫ້ພວກນັກສືບຝະລັ່ງມີຄວາມວຸ້ນວາຍ. ໃນພະແນກເກັບມ້ຽນ ເອກະສານຂອງກະຊວງອານານິຄົມຝະລັ່ງໄດ້ຮັກສາສຳເນົາບັນດາເອກະສານດ່ວນຂອງ ທາງການຂອງກົມຮັກສາຄວາມສະຫງົບທີ່ສົ່ງໃຫ້ ອານແບ ຊາໂຣ. ເອກະສານລົງວັນທີ ໓໐ເດືອນກໍລະກົດ ປີ ໑໙໒໓ ລາຍງານວ່າ: "ຫງວຽນອາຍກວັກ ບອກໃຫ້ຮູ້ວ່າເພິ່ນໄປພັກຜ່ອນ ໑໐ ມື້ ແຕ່ເຖິງປານນີ້ ໄດ້ໜຶ່ງເດືອນແລ້ວ ແຕ່ກໍຍັງບໍ່ເຫັນກັບມາເທື່ອ. ຄົນອານນາມຜູ້ນີ້ມີບົດບາດສຳຄັນ ຢູ່ໃນຂະບວນການກອມມູນິດຢູ່ປະເທດເມືອງອື່ນ..."

ວັນທີ ໒ ເດືອນຕຸລາ ພັດມີເອກະສານສະບັບໃໝ່ອີກວ່າ "ໃນໂທລະເລກ ສະບັບເລກທີ ໒໓໔ ລົງວັນທີ ໓໐ ເດືອນສິງຫາ, ທ່ານໄດ້ບອກໃຫ້ພວກຂ້າພະເຈົ້າຮູ້ເຖິງການສູນຫາຍຢ່າງບໍ່ມີຮ່ອງຮອຍຂອງຫງວຽນອາຍກວັກ, ນັກປະຕິວັດຄົນອານນາມທີ່ເປັນສະມາຊິກຂອງອົງການຈັດຕັ້ງກອມມູນິດທັງເປັນຫົວໜ້າບັນນາທິການຂອງໜັງສືພິມ"ປາ

ຣິຢາ". ຂ້າພະເຈົ້າຂໍລາຍງານໃຫ້ທ່ານຊາບຕື່ມວ່າ ການຊອກຫາຫວວຽນເຕິດແຫ່ງຊຶ່ງ ເປັນທີ່ຮູ້ຈັກໃນນາມ ຫວວຽນອາຍກວັກ ມາເຖິງດຽວນີ້ ບໍ່ໄດ້ຮັບຜົນຫຍັງເລີຍ..."

ໜຶ່ງປີຕໍ່ມາ ຄືໃນເດືອນຕຸລາ ປີ ໑໙໔໘ ກະຊວງອານານິຄົມໄດ້ຮັບໂທລະເລກລັບສະບັບໜຶ່ງ ທີ່ສົ່ງມາຈາກສະຖານເອກອັກຄະລັດຖະທູດຝະລັ່ງປະຈຳ ນິດສະກູທີ່ຫາກໍເປີດຂຶ້ນພາຍຫລັງທີ່ມີການສ້າງຕັ້ງສາຍພົວພັນການທູດລະຫວ່າງ ຝະລັ່ງ ແລະ ປະເທດລັດເຊຍໂຊວຽດ. ໂທລະເລກລັບມີເນື້ອໃນວ່າ "ຂໍລາຍງານວ່າ ຫວວຽນອາຍກວັກນັກກອມມູນິດຜູ້ກ່ອນ ໄດ້ປະກົດຕົວຢູ່ ມົດສະກູ".

ບົນດິນແດນຂອງຜູ້ເບີກທາງ

໑

ການທົດສອບອັນຫນັກຫນ່ວງໄດ້ຕັ້ງລົງເທິງບ່າຂອງອຳນາດໂຊວຽດໃນຊຸມປີທຳອິດຂອງການລົງຕົວ ນັ້ນແມ່ນສະພາບຫລົ້ມຈົມ, ໄພອຶດຫິວ, ການປິດລ້ອມຂອງພວກຈັກກະພັດ, ການແຊກແຊງຈາກຕ່າງດ້າວ, ສົງຄາມກາງເມືອງ... ແຕ່ເຖິງຢ່າງໃດ ກໍຕາມ ບໍ່ແມ່ນສິ່ງເຫລົ່ານັ້ນທີ່ໄດ້ຝັງຢູ່ໃນດວງໃຈຂອງບັນດານັກຮົບອາວຸໂສແຫ່ງ ຂະບວນການກອມມູນິດສາກົນ ທີ່ມີຫນ້າຢູ່ປະເທດລັດເຊຍໂຊວຽດ ຢູ່ໃນຊຸມເດືອນປີອັນຍາກ ຈະຫລົງລືມໄດ້. ພວກເພິ່ນມັກເລົ່າໃຫ້ເພື່ອນ ແລະ ເພື່ອນຮ່ວມຮົບຟັງກ່ຽວກັບຖະຫນົນຫົນທາງ, ບັນດາສະຫນາມຫລວງອັນເກົ່າແກ່ຂອງມົດສະກູທີ່ສະຫວ່າງສະໄຫວໄປດ້ວຍ ທຸງແພ່ນປ້າຍຄຳຂວັນສີແດງສົດ; ກ່ຽວກັບຄວາມກະຕືລືລົ້ນປະຕິວັດອັນສູງສົ່ງ ຢ່າງບໍ່ມີຂອບເຂດຂອງກຳມະກອນ ແລະ ຊາວນາ; ກ່ຽວກັບຄວາມເຊື່ອຫມັ້ນຢ່າງຫນັກແຫນ້ນ ຕໍ່ໄຊຊະນະສຸດທ້າຍຂອງຊາວໂບນເຊວິກ ທີ່ຍາດເອົາອຳນາດມາໄດ້ໃນປະເທດ ອັນກວ້າງ

ໃຫຍ່ໄພສານ ແລະ ຫຼ້າຫຼັງປະເທດໜຶ່ງ, ຄວາມເຊື່ອໝັ້ນດັ່ງກ່າວ ໄດ້ເປັນສິ່ງປຸກລະດົມກຳລັງໃຈຂອງເພື່ອນມິດຕ່າງປະເທດ. ເດີໂຊວານຢີ ແກັກນາແນດໂຕ ສະມາຊິກຜູ້ອາວຸໂສຄົນໜຶ່ງຂອງພັກກອມມູນິດອີຕາລີ ຊຶ່ງຕໍ່ຈາກນັ້ນມາ ໄດ້ເປັນເພື່ອນ ສະໜິດຂອງຫວວຽນອາຍກວັກ ໄດ້ຂຽນກ່ຽວກັບການເດີນທາງຢ້ຽມຢາມປະເທດ ລັດເຊຍໂຊວຽດເທື່ອທຳອິດຂອງຕົນດັ່ງນີ້: "ໃນໝູ່ພວກເຮົາເວລານັ້ນມີໃຜແດ່ທີ່ຮູ້ສຶກໜາວສັ່ນຢູ່ໃນເສື້ອຄຸມບາງໆທີ່ແທດເໝາະກັບອາກາດຂອງໂຣມ, ເຊເນີ, ເນອາໂປນ ? ໝາກຫົວໃຈ ພວກຂ້ອຍກຳລັງເຕັ້ນແຮງຂຶ້ນ, ພວງແກ້ມພວກຂ້ອຍຮ້ອນ, ດວງຕາຂອງພວກຂ້ອຍໃສແຈ້ງ..."

ຄວາມຮູ້ສຶກແບບນີ້ລະ ທີ່ທະວີຄູນຂຶ້ນດ້ວຍຄວາມຮ້ອນແຮງທີ່ເປັນ ຈຸດສະເພາະຂອງນິໄສຂອງເພິ່ນ ແລະ ການຮັບຮູ້ໂລກແບບຄົນມັກຄິດມັກຝັນ ເປັນຄວາມຮູ້ສຶກທີ່ຄອບຄອງຈິດໃຈຂອງນັກກອມມູນິດຫວຽດນາມຄົນທຳອິດ ເມື່ອເພິ່ນກ້າວລົງຢຽບຂັ້ນໄດກຳປັ່ນໂຊວຽດ "ກາກ ລຽບຄະນຽດ" ແລ້ວຢືນຢູ່ທ່າເຮືອຂອງ ເປໂຕຣກຣາດ.

ເພິ່ນບໍ່ມີໜັງສືຫຍັງ ນອກເໜືອໄປຈາກ "ໃບອະນຸຍາດເຂົ້າເມືອງ" ອອກໃຫ້ໃນນາມເປັນນັກທ່ອງທ່ຽວ ເຂົ້າປະເທດໂຊວຽດລັດເຊຍ ທີ່ໃສ່ຊື່ ແຈນວາງ. ເງິນອັດໜຶ່ງກໍບໍ່ມີຄາງໃນຖົງ. ເງິນທັງໝົດຂອງເພິ່ນ ທີ່ສະສົມໄວ້ສຳລັບການເດີນທາງ ແສນໄກ ກໍຖືກໄພເງິນເຟີ້ ຢ່າງຮຸນແຮງຢູ່ ເຢຍລະມັນ ຈົນສິ້ນເນື້ອປະດາຕົວ. ເວລານັ້ນຢູ່ເຢຍລະມັນ ຈະຊື້ໜັງສືພິມໜຶ່ງສະບັບ ກໍຕ້ອງຄວັກເງິນໃນກະເປົາ ເປັນພັນໆມາກຈຶ່ງຈະຊື້ໄດ້. ສິ່ງຂອງເດີນທາງທັງໝົດ ກໍມີພຽງແຕ່ຫີບໃສ່ເຄື່ອງເບົາໆເທົ່ານັ້ນ ໂດຍແມ່ນສະຫາຍຝະລັ່ງຄົນໜຶ່ງ ເປັນຜູ້ມອບໃຫ້ຢູ່ສະຖານີລົດໄຟກ້ຳເໜືອ ປາຣີ.

ແຕ່ບັນຫາມະຍົກມະຍ່ອຍທັງໝົດເຫຼົ່ານັ້ນມັນຈະມີຄວາມໝາຍຫຍັງອີກຖ້າທຽບໃສ່ຄວາມຮູ້ສຶກທີ່ພຸ່ງພົ້ນຂຶ້ນເໝືອນດັ່ງສຽງໂຮແຊວເບີກບານມ່ວນຊື່ນກັບໄຊຊະນະ: ສຸດທ້າຍ, ເພິ່ນຄົນຫວຽດນາມຜູ້ທຳອິດກໍມີໜ້າຢູ່ເທິງດິນແດນຂອງປະເທດເຊິ່ງເປັນບ່ອນທີ່ເຮັດໃຫ້ຄວາມຝັນໃນໄວໜຸ່ມ ກ່ຽວກັບອິດສະຫຼະພາບ ແລະ ຄວາມຜາສຸກປະກົດເປັນຈິງ, ບ່ອນທີ່ປະຊາຊົນຜູ້ຖືກກົດຂີ່ຂູດຮີດມາເປັນຮ້ອຍໆປີແຕ່ມາບັດນີ້ໄດ້ກາຍມາເປັນເຈົ້າຊາຕາກຳຂອງຕົນເອງ ຢ່າງແທ້ຈິງ. ເພິ່ນເຕັມໄປດ້ວຍກຳລັງວັງຊາ ເພາະວ່າ ອາຍຸຂອງເພິ່ນຫາກໍໄດ້ ໓໓ ປີເທົ່ານັ້ນ. ນະແຫ່ງນີ້ ປະເທດທີ່ຍິ່ງໃຫຍ່ແຫ່ງນີ້ ທີ່ເປັນອູ່ຂອງ

ການປະຕິວັດໂລກ ເພິ່ນຈະເລີ່ມຕົ້ນບຸກເບີກເສັ້ນທາງເພື່ອການປົດປ່ອຍປະຊາຊົນ ຂອງເພິ່ນໃນອະນາຄົດ. ສຸດທ້າຍສິ່ງທີ່ເພິ່ນເຄີຍຝັນໄວ້ໃນຊຸມປີຫລັງໆນີ້ອາດປະກົດເປັນຈິງ, ນັ້ນຄືການໄດ້ພົບກັບ ເລນິນ ຜູ້ຍິ່ງໃຫຍ່ ເພາະວ່າແນວຄິດຂອງຜູ້ຍິ່ງໃຫຍ່ຄົນນີ້ ໄດ້ຄອບຄອງຈິດໃຈເພິ່ນຢ່າງເລິກເຊິ່ງ. ພໍແຕ່ໃນນາທີທຳອິດທີ່ຢຽບຍ່າງຢູ່ເທິງດິນແດນໂຊວຽດ ເພິ່ນໄດ້ເລົ່າຄວາມຝັນທີ່ຝັງໃນໃຈດັ່ງກ່າວສູ່ນາຍທະຫານປ້ອງກັນຊາຍແດນຜູ້ທີ່ກວດໜັງສືຜ່ານແດນຟັງວ່າ:

"ເຈົ້າມາປະເທດລັດເຊຍໂຊວຽດ ເພື່ອຈຸດປະສົງອັນໃດ ?" ນາຍທະຫານປ້ອງກັນຊາຍແດນຖາມ ໃນຂະນະທີ່ຈົດໃບແຈ້ງເຂົ້າເມືອງ.

"ກ່ອນອື່ນໝົດ ຂ້ອຍມີຄວາມປະສົງຢາກພົບ ເລນິນ".

"ໜ້າເສຍດາຍທີ່ວ່າ ໃນປະຈຸບັນນີ້ເປັນໄປບໍ່ໄດ້ ເພາະວ່າ ສະຫາຍ ເລນິນບໍ່ສະບາຍ".

ຫງວຽນອາຍກວັກ ຕ້ອງພຳນັກຢູ່ ເປໂຕຣກຣາດໄລຍະໜຶ່ງ, ຍ້ອນວ່າໜັງສືຂອງເພິ່ນບໍ່ໄດ້ບອກແຈ້ງວ່າ ເພິ່ນເປັນນັກກອມມູນິດຝະລັ່ງທີ່ຖືກສົ່ງມາປະຕິບັດໜ້າທີ່ ຢູ່ສາກົນກອມມູນິດ. ຈຳເປັນຕ້ອງໄດ້ຖາມຜູ້ຕາງໜ້າຂອງພັກກອມມູນິດຝະລັ່ງຢູ່ໃນຄະນະບໍລິຫານງານສາກົນກອມມູນິດຄືນອີກ ເພື່ອໃຫ້ສະຫາຍດັ່ງກ່າວຮັບປະກັນເອົາເພິ່ນ. ສຸດທ້າຍລະບຽບການແຕ່ລະຢ່າງອັນຈຳເປັນກໍໄດ້ສຳເລັດລົງ,ແລ້ວລົດໄຟກໍນຳເອົາຫງວຽນໄປມົດສະກູ.

ຫງວຽນ ໄດ້ຫວນຄືນເຖິງວັນເຫລົ່ານັ້ນໄວ້ດັ່ງນີ້: "ຕອນຢຽມຢາມ ສະຫະພາບໂຊວຽດ ເທື່ອທຳອິດ ຂ້ອຍໄດ້ເຫັນວ່າປະເທດໂຊວຽດ ໄດ້ເລີ່ມຕົ້ນເສັ້ນທາງຂອງຕົນຢູ່ໃນເງື່ອນໄຂອັນລຳບາກຍາກແຄ້ນສ່ຳໃດ. ແມ່ນເລື່ອງຍາກທີ່ສຸດທີ່ຈະເລົ່າກ່ຽວກັບລັດທິວິລະຊົນອັນສູງສົ່ງກ່ຽວກັບນ້ຳໃຈກຽມພ້ອມເສຍສະຫລະຂອງກຳມະກອນ ແລະ ຊາວນາທີ່ລົງມືປະຕິບັດການກໍ່ສ້າງສັງຄົມນິຍົມ. ໃນຂະນະດຽວກັນ ບັນດາໝາກຜົນທຳອິດຂອງປະຊາຊົນໂຊວຽດໄດ້ປະກົດຕົວຢູ່ຕໍ່ໜ້າຂ້ອຍ. ຄວາມກ້າວໜ້າຢ່າງໄວວາຂອງປະເທດຊາດໂຊວຽດນັບທັງບໍ່ວ່າຜົນສຳເລັດອັນໃດກໍຕາມ ໄດ້ເຮັດໃຫ້ນັກປະຕິວັດທຸກຄົນມີຄວາມຮູ້ສຶກເບີກບານມ່ວນຊື່ນ ແລະ ມີຄວາມສຸກ, ຮູ້ສຶກທະນົງໃຈໃນພາລະກິດແຫ່ງການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່".

ຄວາມຈິງກໍເປັນຄືແນວນັ້ນແທ້, ມີຫລາຍສິ່ງຫລາຍຢ່າງທີ່ ຫງວຽນ ໄດ້ເຫັນ ຢູ່

ມົດສະກູ ແລະ ຢູ່ບົນເສັ້ນທາງໄປຫາມົດສະກູ ມັນແຕກຕ່າງຢ່າງສິ້ນເຊີງກັບສິ່ງທີ່ ເພິ່ນຄິດໄວ້. ໜັງສືພິມນາຍທຶນຝະລັ່ງ ພະຍາຍາມຢ່າງສຸດຄວາມສາມາດ ເພື່ອໃສ່ຮ້າຍ - ປ້າຍສີປະເທດຂອງຊົນຊັ້ນກຳມາຊີບຜູ້ໄດ້ຮັບໄຊຊະນະ. ສ່ວນບັນດາຂ່າວຄາວທີ່ມີຄວາມຈິງກ່ຽວກັບປະເທດລັດເຊຍໂຊວຽດຊ້ຳພັດຖືກລົງພິມຢູ່ເທິງໜ້າໜັງສືພິມຝ່າຍຊ້າຍແບບຊັກຊ້າ.

ຕົກມາຮອດກາງປີ ໑໙໒໑ ການດຳເນີນນະໂຍບາຍເສດຖະກິດໃໝ່ ຢ່າງກ້າຫານຂອງພັກໂບນເຊວິກ ທີ່ຢູ່ພາຍໃຕ້ການນຳພາຂອງ ເລນິນ ນັບມື້ນັບໃຫ້ດອກອອກຜົນທີ່ສະຫງ່າງາມຢ່າງປະຈັກຕາ. ຊຸມປີແຫ່ງຄວາມອຶດຢາກຂາດເຂີນ, ເສດຖະກິດ ຫລົ້ມຈົມ, ວິກິດການດ້ານເຊື້ອໄຟ ແລະ ຄົມມະນາຄົມຂົນສົ່ງ ເຮັດໃຫ້ປະເທດຕົກຢູ່ໃນ ສະພາບຖອຍຫລັງຄືນຫາອະດີດ. ປະເທດລັດເຊຍໄດ້ກ້າວເຂົ້າສູ່ໄລຍະ ແຫ່ງການພຸ່ງຂຶ້ນຂອງເສດຖະກິດແຫ່ງຊາດ. ຊາວນາໄດ້ຮັບຜົນໃນການເກັບກ່ຽວຢ່າງອຸດົມສົມບູນ, ຂະບວນລົດໄຟທີ່ບັນຈຸເຂົ້າບະເລຈີນເຕັມແລ່ນມາຈາກທົ່ວສາລະທິດຂອງດິນແດນລັດເຊຍໂຊວຽດ ແລະ ຊ່ວງເສົ້າກັນມຸ່ງໜ້າສູ່ເປໂຕຣກຣາດ ເພື່ອສົ່ງເຂົ້າບະເລອອກນອກ ປະເທດ. ບັນດາໜັງສືພິມໄດ້ລົງຂ່າວເປັນປະຈຳ ກ່ຽວກັບການຫລຸດລາຄາສິນຄ້າ ອຸດສາຫະກຳ. ປ້າຍໂຄສະນາສິນຄ້າຢູ່ຕາມຖະໜົນ ຕະແວກສະກາຍຢາ, ເປຕະຣົບກາ, ກູຊະເນດສະກີ ໂມສ ມີຄວາມເວົ້າທີ່ເຊີນຊວນວ່າ ມີສິນຄ້າໃຫ້ເລືອກຕາມໃຈມັກ.ຫລຸດລາຄາ ໔໐%. ຜູ້ທີ່ພົບວ່າສິນຄ້າອັນໃດແດ່ທີ່ຂາຍຢູ່ຮ້ານສັບພະສິນຄ້າແຫ່ງລັດທີ່ແພງກວ່າສິນຄ້າທີ່ຂາຍຢູ່ຮ້ານຄ້າອື່ນ ຜູ້ນັ້ນຈະໄດ້ຮັບລາງວັນ.

ເມື່ອເວລາກ່າວຄຳປາໄສທີ່ສະໄໝປະຊຸມຄົບຄະນະສະພາໂຊວຽດເມືອງມົດສະກູ (ນັ້ນແມ່ນຄຳປາໄສຄັ້ງສຸດທ້າຍຂອງຜູ້ນຳພັກ ແລະ ປະຊາຊົນໂຊວຽດ) ວ.ອີ.ເລນິນ ໄດ້ມ້ວນທ້າຍ ດ້ວຍຄວາມເວົ້າທີ່ໃຫ້ກຳລັງໃຈ ແລະ ມີລັກສະນະຄາດຄະເນວ່າ : "ຈາກລັດເຊຍ ທີ່ດຳເນີນນະໂຍບາຍເສດຖະກິດໃໝ່ຈະເກີດມີລັດເຊຍສັງຄົມນິຍົມ!"*. ແລ້ວຫໍ່ແໜງຂອງສັງຄົມນິຍົມຢັ້ງຢືນໃຫ້ເຫັນເຊິ່ງຄວາມຄາດຄະເນ ອັນປີຊາສາມາດຂອງ ເລນິນ ກໍ່ໄດ້ບຸກເບີກເສັ້ນທາງໃຫ້ຕົນເອງຢ່າງມີຜົນສຳເລັດ.

ໃນເດືອນສິງຫາປີ ໑໙໒໑ ມີເຫດການໃຫຍ່ເກີດຂຶ້ນຢູ່ ມົດສະກູ.ລັດຖະບານໂຊ

---

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໔໕, ໜ້າ ໓໐໙. (ເປັນພາສາລັດເຊຍ)

ວຽດ ຕົກລົງເປີດງານວາງສະແດງຜົນສຳເລັດທາງດ້ານການກະສິກຳທົ່ວລັດເຊຍ ອັນເປັນງານວາງສະແດງຄັ້ງທຳອິດໃນປະຫວັດສາດຂອງລັດກຳມະກອນ ແລະ ຊາວນາ . ໜັງສືພິມ "ປຣາວະດາ" ຂຽນໄວ້ວ່າ: "ໄຊຊະນະຕາມລຳດັບອັນໜຶ່ງອີກຂອງຊົນຊັ້ນກຳມາຊີບປະຕິວັດ".

ໃນມື້ວັນອາທິດ ຫງວຽນອາຍກວັກ ພ້ອມດ້ວຍບັນດາສະຫາຍອື່ນໃນສາກົນກອມມູນິດ ໄດ້ໄປເບິ່ງການວາງສະແດງ. ເພິ່ນຢຸດຢູ່ຕາມຫໍວາງສະແດງຢ່າງດົນດ້ວຍຄວາມຮູ້ສຶກຊື່ນຊົມ. ເພິ່ນສັງເກດເບິ່ງໃບໜ້າກ່ຳແດງ ແລະ ຮອຍຍີ້ມຢ່າງມີຊີວິດຊີວາ ຂອງຊາວນາທີ່ມາຍັງມົດສະກູ ຈາກເຂດແຂວງຕ່າງໆຂອງລັດເຊຍ ແລະ ເຂດຊົນຊາດ ທີ່ຫ່າງໄກ. ເພິ່ນຕັ້ງໃຈຟັງພວກເຂົາເຈົ້າອະທິບາຍໃຫ້ບັນດາຜູ້ຊົມຟັງກ່ຽວກັບ ໝາກຜົນໃນການອອກແຮງງານຂອງພວກເຂົາເຈົ້າດ້ວຍຄວາມພາກພູມໃຈຄືແນວໃດ. ນັ້ນຄື ມັດເຂົ້າບະເລ ທີ່ມີເມັດດົກໜາ ແລະ ຕື່ງດີ, ກອງນອນຝ້າຍຂາວປານຫິມະ ສູງເທົ່າກັບໜ່ວຍພູ, ບັນດາແຜ່ນພົມຕ່ຳດ້ວຍມືງາມຍອດຢ້ຽມ. ເພິ່ນຄິດໃນໃຈວ່າ: "ຕ້ອງ ອອກແຮງງານຢ່າງມີອິດສະຫລະພາບຈຶ່ງຈະໄດ້ໝາກຜົນເຫລົ່ານີ້".

ທີ່ມົດສະກູ ເຊັ່ນດຽວກັນກັບພວກນັກເຄື່ອນໄຫວຄົນອື່ນໆຂອງສາກົນກອມມູນິດນັ້ນ ຫງວຽນອາຍກວັກ ພັກຢູ່ໂຮງແຮມ "ລຸກ " ຊຶ່ງຕັ້ງຢູ່ຖະໜົນຕະແວດສະກາຢາ (ປະຈຸບັນແມ່ນໂຮງແຮມ "ແຊນຕະຣາເລຍອານາຢາ"). ຈາກໂຮງແຮມແຫ່ງນີ້ໄປຫາ ບ່ອນເຣັດວຽກ, ເພິ່ນຍ່າງຜ່ານສະໜາມຫລວງ ມາແຍດ ແລະ ຖະໜົນ ໂມໂຄໄວຢາ ຢ່າງເປັນປົກກະຕິ. ກົງຈັກຂອງຄະນະບໍລິຫານງານ ສາກົນກອມມູນິດ ມີສຳນັກງານຕັ້ງຢູ່ໃນຕຶກຫລັງໜຶ່ງຢູ່ຖະໜົນ ຕະໂຣອິດສະກີ, ກົງກັນຂ້າມກັບຫໍສະໝຸດຂອງຫໍພິພິທະພັນ ຣູມີອານແຊັບ (ປະຈຸບັນແມ່ນຫໍສະໝຸດທີ່ປະດັບຊື່ ວ.ອີ.ເລນິນ). ນັບຕັ້ງແຕ່ມື້ທຳອິດທີ່ ຫງວຽນອາຍກວັກ ມາຮອດມົດສະກູ ເພິ່ນເປັນພະນັກງານຂອງພະແນກ ຕາເວັນອອກແຫ່ງຄະນະບໍລິຫານງານຂອງສາກົນກອມມູນິດ. ເຊັ່ນດຽວກັບຄົນ ຫວຽດນາມທຸກໆຄົນ, ເພິ່ນຊິນເຄີຍກັບການຕື່ນນອນແຕ່ເຊົ້າໆ ເມື່ອຟ້າຫາກໍເລີ່ມແຈ້ງ ເພິ່ນ ອອກຈາກໂຮງແຮມ, ຍ່າງເລາະຕາມຖະໜົນຕະແວດສະກາຢາ ໄປຮອດສະໜາມແດງ.

ຫງວຽນອາຍກວັກ ເລີ່ມປະຕິບັດວຽກງານຂອງຕົນ ຢູ່ພະແນກຕາເວັນອອກຂອງຄະນະບໍລິຫານງານ ສາກົນກອມມູນິດ ດ້ວຍການຂຽນຈົດໝາຍ ໃຫ້ຄະນະປະທານຂອງຄະນະບໍລິຫານງານ ສາກົນກອມມູນິດ ເຊິ່ງໃນນັ້ນ ເພິ່ນໄດ້ປະກອບ ຄວາມຄິດ

ຄວາມເຫັນ ແລະ ສະຫລຸບກ່ຽວກັບຂະບວນການປົດປ່ອຍຊາດຢູ່ອິນດູຈີນ. ໃນຈົດໝາຍສະບັບນັ້ນ ເພິ່ນຊີ້ອອກໃຫ້ເຫັນແຈ້ງວ່າ ຈີນຊຸ້ນກຳມາຊີບຢູ່ຕາມບັນດາປະເທດເມືອງຂຶ້ນຂອງຝະລັ່ງ ແມ່ນບໍ່ເກີນ ໒% ຂອງພົນລະເມືອງ ແລະ ຍັງບໍ່ມີອົງການຈັດຕັ້ງສະເພາະຂອງຕົນເອງ; ຊາວນາສ່ວນຫລາຍແມ່ນພາກສ່ວນທີ່ທຸກຍາກກາກກຳຫລາຍທີ່ສຸດ ໃນໝູ່ປະຊາຊົນ, ດັ່ງນັ້ນ, ຄວາມອາດສາມາດປະຕິວັດຂອງພວກເຂົາເຈົ້າຈິ່ງຍິ່ງໃຫຍ່ທີ່ສຸດ. ເພິ່ນຖືວ່າປັນຍາຊົນເປັນກຳລັງທີ່ມີແນວຄິດປະຕິວັດ ແລະ ຊາດນິຍົມ. ຕາມຄວາມເຫັນຂອງເພິ່ນນັ້ນ ໜຶ່ງໃນບັນດາເງື່ອນໄຂທຳອິດ ເພື່ອຂະຫຍາຍຂະບວນການປົດປ່ອຍຢູ່ອິນດູຈີນໃຫ້ໄດ້ຮັບຜົນສຳເລັດ ແມ່ນຕ້ອງສົມທົບການເຄື່ອນໄຫວຂອງບັນດານັກກອມມູນິດກັບຝ່າຍປະຕິວັດຮັກຊາດ. ຫລັງຈາກກ່າວເຖິງຄວາມຈຳເປັນຕ້ອງເຕົ້າໂຮມ ກຳລັງແຮງຂອງບັນດານັກປະຕິວັດຢູ່ປະເທດເມືອງຂຶ້ນເຂົ້າກັບກຳມະກອນຢູ່ເມືອງແມ່ ແລະ ຊາວຜູ້ອອກແຮງງານຢູ່ປະເທດສັງຄົມນິຍົມທຳອິດ ເໝືອນດັ່ງທີ່ ເລນິນ ເຄີຍໄດ້ຊີ້ບອກຫລາຍເທື່ອແລ້ວນັ້ນ, ຫວຽນອາຍກວັກ ສະເໜີໃຫ້ຈັດຕັ້ງສາຍຕິດຕໍ່ອັນແໜ້ນແກ່ນແລະເປັນປົກກະຕິລະຫວ່າງມົດສະກູ, ອິນດູຈີນ ແລະ ປາຣີ. ເພິ່ນຮຽກຮ້ອງໄປຍັງຄະນະນຳສາກົນກອມມູນິດໃຫ້ເອົາໃຈໃສ່ຫລາຍກວ່າເກົ່າຕໍ່ຂະບວນການປົດປ່ອຍຢູ່ຕາມປະເທດເມືອງຂຶ້ນ ແລະ ປະເທດທີ່ບໍ່ມີເອກະລາດ, ນັບທັງປະເທດອິນດູຈີນ. ຫວຽນ ຂຽນວ່າ : "ບັນດາປະຊາຊາດເມືອງຂຶ້ນທີ່ຖືກກົດຂີ່ຊຶ່ງຖືກສຽງສະທ້ອນຂອງການປະຕິວັດເດືອນຕຸລາປຸກໃຫ້ຕື່ນຂຶ້ນນັ້ນ ໄດ້ຫັນໄປເຂົ້າຝ່າຍສາກົນກອມມູນິດ ເຊິ່ງເປັນພັກການເມືອງພັກດຽວທີ່ເອົາໃຈໃສ່ຖາມອ້າຍນ້ອງຕໍ່ພວກເຂົາເຈົ້າ ທັງເປັນພັກທີ່ພວກເຂົາເຈົ້າ ມອບ ຄວາມຫວັງໃນການປົດປ່ອຍໄວ້ນຳ".

ນັບຕັ້ງແຕ່ມື້ທຳອິດທີ່ພຳນັກຢູ່ມົດສະກູພຸ້ນ, ຫວຽນອາຍກວັກ ໄດ້ມີ ໝູ່ເພື່ອນຫລາຍຄົນ, ພິເສດແມ່ນພະນັກງານໂຊວຽດ ແລະ ເພື່ອນຈາກປະເທດອື່ນໆທີ່ເຮັດວຽກຢູ່ໃນຄະນະບໍລິຫານງານສາກົນກອມມູນິດ. ທຸກຄົນຕ່າງກໍເຫັນວ່າເພິ່ນແມ່ນຄົນທີ່ມີພະລັງດົງດູດ, ມີວັດທະນະທຳສູງ, ເຂົ້າຄົນງ່າຍ. ແນ່ນອນວ່າ, ຍັງມີສິ່ງອື່ນອີກທີ່ມີ ຄວາມໝາຍສຳຄັນນັ້ນຄື ຢູ່ບົນດິນແດນໂຊວຽດ ເພິ່ນເປັນຜູ້ຕາງໜ້າຄົນທຳອິດຂອງ ຫວຽດ-ນາມ ທີ່ຕັ້ງຢູ່ໄກແສນໄກ.

ໃນເວລານັ້ນ ສຳລັບຫລາຍຄົນຫວຽດນາມທີ່ເປັນ "ແຂວງພົ້ນທະເລ" ແຂວງໜຶ່ງຂອງຝະລັ່ງນັ້ນເປັນຄື "ປະເທດທີ່ລຶລັບ" ໄກພົ້ນໂຍດ, ຄ້າຍຄືວ່າຢູ່ເທິງໂລກໜ່ວຍ

ອື່ນພຸ້ນ. ແຕ່ວ່າເວລານັ້ນມີຄົນລັດເຊຍຈຳນວນໜຶ່ງທີ່ຮູ້ຈັກກ່ຽວກັບຫວຽດນາມສ່ຳໃດສ່ຳໜຶ່ງແລ້ວ. ນັບຕັ້ງແຕ່ກາງສະຕະວັດທີ ໑໙ ພຸ້ນ, ນັກປະພັນລັດເຊຍ ກ.ສະຕາຢູໂກ-ວິດ ກໍໄດ້ໄປຫວຽດນາມຫລາຍເທື່ອ. ດ້ວຍຈິດໃຈໂກດເຄືອງຢ່າງແທ້ຈິງ ແລະ ມີໃຈເມດຕາສົງສານລະດັບສູງ ເພິ່ນໄດ້ພັນລະນາເຖິງໂທດກຳອັນປ່າເຖື່ອນໂຫດຮ້າຍ ຂອງພວກຣຸກຮານຝະລັ່ງຢູ່ນາມກີ່ ໄວ້ໃນປຶ້ມບັນທຶກເຫດການຂອງເພິ່ນ. ນ.ກູມີເລີບ ນັກກະວີລັດເຊຍຜູ້ໜຶ່ງ ຊົມເຊີຍທຳມະຊາດອັນສວຍງາມຂອງຫວຽດນາມ ໃນບາງບົດກອນຂອງເພິ່ນ.

ການພົວພັນຕິດຕໍ່ໂດຍກົງເທື່ອທຳອິດລະຫວ່າງຊາວໂຊວຽດ ແລະ ຊາວຫວຽດນາມຮັກຊາດເລີ່ມມີມາແຕ່ປີ ໑໙໑໙. ໄລຍະນັ້ນດັ່ງໄດ້ເວົ້າຢູ່ຂ້າງເທິງແລ້ວຄົນຫວຽດນາມຈຳນວນໜຶ່ງຢູ່ໃນກອງທັບແຊກແຊງຂອງຝະລັ່ງທີ່ຕັ້ງຖານທັບຢູ່ ໂອແດດຊາ ກໍໄດ້ເຂົ້າເປັນຝ່າຍປະຕິວັດລັດເຊຍ ຢູ່ ວະລາດີວົດສະຕົກ ບ່ອນທີ່ລັດຖະບານຝະລັ່ງ ສົ່ງທະຫານພົນປືນໜຶ່ງກອງພັນ ຊຶ່ງລ້ວນແຕ່ເປັນຄົນອິນດູຈີນທັງນັ້ນ ມາຊ່ວຍທະຫານ ອາເມລິກາ ແລະ ທະຫານຍີ່ປຸ່ນ, ມີຄົນຫວຽດນາມບໍ່ໜ້ອຍໄດ້ເຂົ້າເປັນຝ່າຍໂຊວຽດ ເຊັ່ນດຽວກັນ. ດຽວນີ້ໃນປີ ໑໙໒໓, ຢູ່ມົດສະກູ ກໍມີໜ້ານັກປະຕິວັດອາຊີບຄົນຫວຽດນາມຜູ້ໜຶ່ງຊຶ່ງເປັນຄືຕົວແທນຜູ້ມີອຳນາດເຕັມຂອງກຳລັງຊາດຮັກຊາດຢູ່ອິນດູຈີນເມືອງຂຶ້ນຝະລັ່ງ.

ເມື່ອມາຮອດປະເທດລັດເຊຍໂຊວຽດບໍ່ດົນ, ຊື່ເພິ່ນໄດ້ປະກົດຢູ່ໜ້າ ໜັງສືພິມ "ປຣາວະດາ". ບັນດາຜູ້ຕາງໜ້າຝ່າຍຊາຍຂອງຊາວນາກວ່າ ໒໐ ປະເທດ ຂອງທະວີບເອີລົບ ແລະທະວີບອາຊີ ໄດ້ມາຊົມງານວາງສະແດງຜົນສຳເລັດທາງດ້ານການກະສິກຳທົ່ວປະເທດລັດເຊຍ. ພວກເຂົາເຈົ້າຕັດສິນໃຈສວຍໂອກາດນີ້ ເພື່ອໂຮມກອງປະຊຸມໃຫຍ່ສາກົນຂອງຊາວນາຢູ່ມົດສະກູ. ກອງປະຊຸມໃຫຍ່ຄັ້ງທຳອິດລະດັບສາກົນຂອງຊົນຊັ້ນຊາວນາໄດ້ເປີດຂຶ້ນໃນວັນທີ ໑໐ ເດືອນຕຸລາປີ ໑໙໒໓ ຢູ່ທີ່ຫ້ອງ ອັງດະເຣແອັບສະກີຂອງວັງກະແຣັມແລັງ. ໃນວັນດັ່ງກ່າວ, ໜັງສືພິມ "ປຣາວະດາ" ໄດ້ພາດຫົວຂໍ້ດ້ວຍອັກສອນໃຫຍ່: "ຊົມເຊີຍ ຢ່າງສຸດອົກສຸດໃຈບັນດາເພື່ອນພັນທະມິດໃໝ່ໃນການຕໍ່ສູ້", "ພັນທະພາບກຳມະກອນ-ຊາວນາທີ່ຍິ່ງໃຫຍ່ ເຕີບໃຫຍ່ຂຶ້ນເພື່ອຕ້ານຄືນພັນທະພາບກົດຂີ່ ແລະ ປຸ້ນສະດົມຂອງພວກນາຍທຶນ ແລະ ເຈົ້າທີ່ດິນ!".

ໃນວັນທີ ໑໒ ເດືອນຕຸລາ ໜັງສືພິມ "ປຣາວະດາ" ພາຍໃຕ້ຫົວຂໍ້ທີ່ວ່າ "ທີ່ກອງປະຊຸມໃຫຍ່ສາກົນຂອງຊາວນາ" ແຈ້ງໃຫ້ຮູ້ວ່າ "ໃນການປະຊຸມສະໄໝທີສອງ ,

ສະຫາຍ ຫງວຽນອາຍກວັກ ຜູ້ຕາງໜ້າອິນດູຈີນທີ່ເປັນປະເທດເມືອງຂຶ້ນຂອງຝະລັ່ງໄດ້ປະກອບຄວາມເຫັນ. ຜູ້ກ່າວຄຳປາໄສໄດ້ຊີ້ໃຫ້ເຫັນວ່າ ຊາວນາອິນດູຈີນຖືກກົດຂີ່ ຢ່າງໜັກໜ່ວງເປັນສອງເທົ່າ: ໜຶ່ງ, ໃນຖານະເປັນຊາວນາເວົ້າລວມ, ສອງ, ໃນຖານະເປັນຊາວນາຂອງປະເທດໜຶ່ງທີ່ເປັນເມືອງຂຶ້ນ".

ຢູ່ໃນບົດປາໄສບົດທຳອິດ ຂອງຫງວຽນອາຍກວັກ ນັກກອມມູນິດຫວຽດນາມ ທີ່ສະເໜີຕໍ່ກອງປະຊຸມໃຫຍ່ສາກົນຂອງຊາວນາ ສະແດງໃຫ້ເຫັນລັດທິສາກົນນິຍົມອັນເລິກເຊິ່ງ, ຄວາມປາຖະໜາຢາກສ້າງຄວາມເປັນເອກະພາບ ແລະ ຄວາມສາມັກຄີ ຂອງບັນດານັກຮົບທັງໝົດ ໃນການຕໍ່ສູ້ ຕ້ານລັດທິຈັກກະພັດ ແລະ ລັດທິເມືອງຂຶ້ນ.ອຸດົມຄະຕິດັ່ງກ່າວ ເປັນເປົ້າໝາຍ ທີ່ເພິ່ນສະແຫວງຫາ ຕະຫລອດຊີວິດຂອງເພິ່ນ.ຢູ່ໃນບົດປາໄສຂອງຕົນ ເພິ່ນໄດ້ປະກາດວ່າ: "ສາກົນກອມມູນິດຂອງພວກເຮົາ ຈະກາຍມາເປັນອົງການຈັດຕັ້ງສາກົນແທ້ ຂອງຊາວຜູ້ອອກແຮງງານໄດ້ ກໍ່ຕໍ່ເມື່ອ ມີຊາວນາ ຝ່າຍຕາເວັນອອກ ຈຳນວນມະຫາສານ ໂດຍສະເພາະຢ່າງຍິ່ງ ບັນດາປະຊາຊາດຢູ່ຕາມບັນດາປະເທດເມືອງຂຶ້ນ ຊຶ່ງຖືກກົດຂີ່ ແລະ ຖືກຂູດຮີດ ຢ່າງປ່າເຖື່ອນທີ່ສຸດ ເຂົ້າຮ່ວມສາກົນກອມມູນິດ ແລະ ປະກອບສ່ວນ ເຂົ້າໃນການເຄື່ອນໄຫວ ຂອງສາກົນເທົ່ານັ້ນ". ບັນດາຜູ້ແທນ ທີ່ເຂົ້າຮ່ວມກອງປະຊຸມໃຫຍ່ ໄດ້ຜ່ານຈົດໝາຍອວຍພອນ ທີ່ສົ່ງເຖິງ ວ.ອີ.ເລນິນ. ໃນສະໄໝປະຊຸມສຸດທ້າຍ, ກອງປະຊຸມໃຫຍ່ ໄດ້ເລືອກຕັ້ງເອົາ ບັນດາອົງການຊີ້ນຳ ຂອງສາກົນຊາວນາ ນັ້ນຄືສະພາຊາວນາສາກົນ ແລະ ຄະນະປະທານ ຂອງສະພາ. ຫງວຽນອາຍກວັກ ຜູ້ຕາງໜ້າອິນດູຈີນ ແລະ ເຊັນ ກາຕາຢາມາ ນັກເຄື່ອນໄຫວຜູ້ຫ້າວຫັນຄົນໜຶ່ງ ຂອງສາກົນກອມມູນິດ ທັງເປັນຜູ້ໜຶ່ງໃນບັນດາຜູ້ກໍ່ຕັ້ງພັກກອມມູນິດຍີ່ປຸ່ນ ຕາງໜ້າບັນດາປະເທດອາຊີ ເຂົ້າຮ່ວມໃນຄະນະປະທານ.

ວັນໜຶ່ງ ເມື່ອ ຫງວຽນອາຍກວັກ ກັບມາຮອດໂຮງແຮມ "ລຸກ" ກໍມີນັກສື່ຂ່າວວາລະສານ "ໝັດໄຟ" ມາພົບ ຢູ່ຫ້ອງໂຖງ ແລະ ໄດ້ຂໍສຳພາດເພິ່ນ. ທ້າຍເດືອນທັນວາ ປີ ໑໙໒໓ ຢູ່ເທິງໜ້າວາລະສານ "ໝັດໄຟ" ມີບົດສຳພາດ ທີ່ພາດຫົວຂໍ້ວ່າ " ເປັນແຂກຂອງຫງວຽນອາຍກວັກ ຜູ້ເປັນສະມາຊິກ ຂອງສາກົນກອມມູນິດ ". ຜູ້ຂຽນ ຕີລາຄາວ່າ ຫງວຽນ ເປັນຄົນສຸພາບ ອ່ອນໂຍນ ແລະ ປານີດມາແຕ່ເກີດ , ເປັນຕົວແທນຂອງວັດທະນະທຳໃໝ່ຢ່າງສົມບູນ "ອາດເປັນໄດ້ວ່າ ວັດທະນະທຳ ແຫ່ງ

ອະນາຄົດ ".

" ...ເປັນໜ້າສົນໃຈວ່າ ອຳນາດປົກຄອງຝະລັ່ງສອນຊາວນາ ຂອງພວກຂ້ອຍໃຫ້ຮູ້ຈັກ ກັບສັບ "ໂບນເຊວິກ" ແລະ"ເລນິນ" ຄືແນວໃດ",ນັກຮັກຊາດ ຫວຽດນາມເວົ້າເຍາະເຍີ້ຍ. "ພວກເຂົາເລີ່ມໄລ່ຈັບຊາວກອມມູນິດໃນໝູ່ປະຊາຊົນອານນາມ ທັງທັງທີ່ບໍ່ມີນັກກອມມູນິດຈັກຄົນ, ພວກເຂົາໄດ້ໂຄສະນາຄືແນວນີ້ລະ".

ຢູ່ ສະຫະພາບໂຊວຽດ ຫວງວຽນອາຍກວັກ ສະແດງໃຫ້ເຫັນແຈ້ງວ່າ ຕົນກໍເປັນນັກໜັງສືພິມ ລະດັບສາກົນຄົນໜຶ່ງ ທີ່ມີຄວາມສາມາດ. ເພິ່ນຂຽນຫລາຍ, ກ່ອນອື່ນໝົດ ຂຽນສົ່ງໄປລົງພິມຢູ່ວາລະສານ " ອິນເປຣໂກຣ " (ຂ່າວສານຂອງ ສາກົນກອມມູນິດ) ທີ່ເປັນກະບອກສຽງ ຂອງຄະນະ ບໍລິຫານງານ ສາກົນກອມມູນິດ. ສະຫາຍ ອານປາຣີ ແມ່ນນັກກອມມູນິດ ຮຸງກາຣີ ຄົນໜຶ່ງ, ທັງເປັນຜູ້ນຳພາ ວາລະສານ " ອິນເປຣໂກຣ " ຕະຫລອດຊຸມປີ ທີ່ວາລະສານຖືກຈັດພິມ. ຕາມທັດສະນະ ຂອງອານປາຣີ ແລ້ວ, ຫວງວຽນອາຍກວັກ ເປັນໜຶ່ງ ໃນບັນດານັກສື່ຂ່າວອາສາສະໝັກ ຜູ້ຫ້າວຫັນທີ່ສຸດ ຂອງວາລະສານ ຈົນຮອດປີ ໑໙໓໙ ຊຶ່ງເປັນປີ ທີ່ວາລະສານ ງົດຈຳໜ່າຍ. ບາງຄັ້ງບາງຄາວ ບົດຂຽນຂອງ ຫວງວຽນອາຍກວັກ ໄດ້ປະກົດອອກຢູ່ ຕາມໜ້າໜັງສືພິມຕ່າງໆ ຂອງໂຊວຽດ. ຫວງວຽນອາຍກວັກ ບໍ່ໄດ້ຂາດການຕິດຕໍ່ ກັບໝູ່ເພື່ອນຂອງເພິ່ນຢູ່ ປາຣີ, ສືບຕໍ່ຂຽນບົດ ສົ່ງໄປລົງພິມຕາມໜັງສືພິມ "ຊູຍມານິເຕ" "ລາ ວີ ອູວະຣິແຢ ","ປາຣີຢາ " ແລະ ອື່ນໆ...

ຫົວຂໍ້ທີ່ຫວງວຽນ ເວົ້າເຖິງ ແມ່ນອຸດົມຮັ່ງມີທີ່ສຸດ. ຂົງເຂດບັນຫາ ທີ່ເພິ່ນເອົາໃຈໃສ່ ກໍກວ້າງຂວາງຫລາຍທີ່ສຸດ. ເພິ່ນເຜີຍແບການກະທຳແບບປຸ້ນສະດົມ ຂອງພວກລ່າເມືອງຂຶ້ນຝະລັ່ງ ຢູ່ອິນດູຈີນ, ຂອງພວກຈັກກະພັດອັງກິດ ຢູ່ຈີນ. ເພິ່ນຂຽນກ່ຽວກັບການຂະຫຍາຍຕົວ ຂອງຂະບວນການກຳມະກອນ ຢູ່ຈີນ, ຍີ່ປຸ່ນ, ຕວກກີ,ກ່ຽວກັບສະພາບຂອງຊາວນາ ຢູ່ບັນດາປະເທດ ໃນທະວີບອາຊີ, ກ່ຽວກັບການຈຳແນກເຊື້ອຊາດຜິວພັນຢູ່ ສະຫະລັດອາເມລິກາ. ເພິ່ນເຜີຍແບນະໂຍບາຍແຜ່ອຳນາດ ຂອງພວກມະຫາອຳນາດຈັກກະພັດ ຢູ່ທະວີບອາຊີ ແລະ ຢູ່ຂົງເຂດມະຫາສະໝຸດປາຊີຟິກ.

ແຕ່ຄາວຍັງຢູ່ປາຣີພຸ້ນ, ຫວງວຽນອາຍກວັກ ເກີດມີຄວາມຄິດຢາກຂຽນປຶ້ມເຫລັ້ມໜຶ່ງທີ່ເຜີຍແບລັດທິລ່າເມືອງຂຶ້ນຝະລັ່ງ. ຢູ່ມົດສະກູ ບັນດາສະຫາຍ ໃນຄະນະບໍລິຫານ

ງານ ສາກົນກອມມູນິດ ແລະ ກອງບັນນາທິການ ວາລະສານ "ອິນເປຣໂກຣ" ໄດ້ຕັ້ງໜ້າຊ່ວຍເພີ່ມ ໃຫ້ປະຕິບັດສຳເລັດສົມຄວາມຕັ້ງໃຈນັ້ນ. ປຶ້ມຫົວນີ້ ໄດ້ຂຽນເປັນພາສາຝະລັ່ງ ໂດຍໃສ່ຫົວຂໍ້ວ່າ "ສານກ່າວຟ້ອງ ລະບອບລ່າເມືອງຂຶ້ນຝະລັ່ງ " ແລະ ໄດ້ຖືກຈັດພິມຢູ່ ປາຣີ ໃນປີ ໑໙໒໕ ໃນຂະນະທີ່ ຫງວຽນອາຍກວັກ ຢູ່ໄກຈາກ ມົດສະກູ ແລະ ຍັງໄກຈາກ ປາຣີ. ບົດຂຽນຫລາຍບົດຂອງ ຫງວຽນອາຍກວັກ ທີ່ເຄີຍລົງພິມ ຢູ່ຕາມໜ້າໜັງສືພິມຝະລັ່ງ ສະບັບຕ່າງໆ ຂອງຝ່າຍຊ້າຍ, ເຊັ່ນໜັງສືພິມ " ປາຣີຢາ " ແລະ ວາລະສານ " ອິນເປຣໂກຣ " ແຕ່ປີ ໑໙໒໐ ມາເຖິງປີ ໑໙໒໕ ໄດ້ຖືກຈັດພິມເປັນປຶ້ມຫົວນີ້.

ບັນດານັກປະຕິວັດຫວຽດນາມ ໄດ້ຊອກຊ່ອງທາງ ເພື່ອຈະສົ່ງປຶ້ມຫົວນີ້ ຈຳນວນໜຶ່ງໄປຍັງ ປະເທດຫວຽດນາມ. ປຶ້ມຫົວນີ້ ໄດ້ຮັບຄວາມນິຍົມຊົມຊອບ ຢ່າງກວ້າງຂວາງໃນໝູ່ຊາວໜຸ່ມຮັກຊາດ. ແຮງດຶງດູດຂອງປຶ້ມຫົວນີ້ຢູ່ບ່ອນວ່າ ນັບເປັນຄັ້ງທຳອິດ ທີ່ນັກຂຽນຫວຽດນາມຄົນໜຶ່ງ ໄດ້ຕີລາຄາ ລັດທິລ່າເມືອງຂຶ້ນ ບົນຫລັກໝັ້ນ ແຫ່ງລັດທິ ມາກ - ເລນິນ, ເປີດເຜີຍໃຫ້ເຫັນວ່າ ຄວາມຂັດແຍ່ງ ລະຫວ່າງ ປະຊາຊົນຫວຽດນາມ ກັບ ພວກລ່າເມືອງຂຶ້ນຝະລັ່ງ ເປັນສິ່ງທີ່ບໍ່ອາດ ປະນີປະນອມໄດ້, ການຂະຫຍາຍຕົວ ຂອງການຕໍ່ສູ້ປົດປ່ອຍຊາດ ຂອງປະຊາຊາດ ຢູ່ຕາມບັນດາປະເທດເມືອງຂຶ້ນ ເຊັ່ນດຽວກັບການພັງທະລາຍ ຂອງລັດທິລ່າເມືອງຂຶ້ນ ແມ່ນສິ່ງທີ່ຫລີກລ່ຽງບໍ່ໄດ້. ໂດຍຊີ້ໃຫ້ເຫັນວ່າ ລັດທິຈັກກະພັດ ແມ່ນສັດຕູຄູ່ອາຄາດລວມ ຂອງບັນດາປະຊາຊາດທັງໝົດ ທີ່ຖືກກົດຂີ່ມັນ ຜູ້ແຕ່ງປຶ້ມຫົວນີ້ ກໍໄດ້ເຮັດໃຫ້ບັນດາຜູ້ອ່ານ ສະຫລຸບໄດ້ວ່າ ການຕໍ່ສູ້ກູ້ຊາດ ຂອງປະຊາຊົນຫວຽດນາມ ແມ່ນສ່ວນປະກອບໜຶ່ງ ທີ່ແຍກອອກບໍ່ໄດ້ ຈາກການຕໍ່ສູ້ຢູ່ໃນທົ່ວໂລກ ເພື່ອປົດປ່ອຍ ບັນດາປະຊາຊາດ ອອກຈາກສາຍໂສ້ຂ້າທາດ - ເມືອງຂຶ້ນ. ຊາວຫວຽດນາມຜູ້ຮັກຊາດ ທີ່ໄດ້ອ່ານ " ສານກ່າວຟ້ອງລະບອບລ່າເມືອງຂຶ້ນຝະລັ່ງ " ລ້ວນແຕ່ ເຫັນແຈ້ງວ່າ ຜູ້ແຕ່ງແມ່ນຜູ້ນຳ ແບບໃໝ່ ຂອງຂະບວນການຮັກຊາດ ທີ່ແຕກຕ່າງກັບຜູ້ນຳພາແບບເກົ່າ ທາງດ້ານຫລັກການ, ເພາະວ່າຜູ້ແຕ່ງແມ່ນຄົນໜຶ່ງ ທີ່ຈົງຮັກພັກດີຕໍ່ທິດສະດີກອມມູນິດ, ເປັນນັກສາກົນນິຍົມ ຢ່າງເຕັມປ່ຽມ.

ເມື່ອເວົ້າເຖິງຄວາມໝາຍ ຂອງປຶ້ມຫົວທຳອິດ ຂອງຫງວຽນອາຍກວັກ ທີ່ມີຕໍ່

ການຂະຫຍາຍຕົວຂອງການປະຕິວັດຢູ່ຫວຽດນາມແລ້ວ, ບັນດານັກປະຫວັດສາດຫວຽດນາມເນັ້ນວ່າ ປຶ້ມເກີດຂຶ້ນ " ຄືລົມພາຍຸທ່າໜຶ່ງ ທີ່ປັດເປົ່າໂງ່ນເມກດຳທີ່ປົກຫຸ້ມ ດວງຕາເວັນ ". ບັນດານັກປະຫວັດສາດຍັງຊີ້ອອກວ່າປຶ້ມ "ສານກ່າວຟ້ອງ ລະບອບລ່າເມືອງຂຶ້ນຝະລັ່ງ " ແມ່ນ "ຜະລິດຕະພົນຂອງການສົມທົບກັນຢ່າງສັດຈະວິພາກ ຢ່າງມີຊີວິດຊີວາ ແລະ ກາຍອິນຊີລະຫວ່າງຫລັກມູນຂອງ ເລນິນ ວ່າດ້ວຍທາດແທ້ ຂອງລັດທິຈັກກະພັດ, ວ່າດ້ວຍບັນຫາຊົນຊາດກັບບົດຮຽນຕົວຈິງ ຂອງຂະບວນການປົດປ່ອຍຊາດຕ້ານລັດທິ ລ່າເມືອງຂຶ້ນ, ກັບການຄົ້ນຄວ້າຢ່າງເລິກເຊິ່ງ ບົດຮຽນແຫ່ງການປະຕິວັດເດືອນຕຸລາ ທີ່ຍິ່ງໃຫຍ່ ".

໒

ນັບຕັ້ງແຕ່ມື້ມາຮອດມົດສະກູ, ຍາມໃດ ຫງວຽນອາຍກວັກ ກໍປາດຖະໜາທີ່ຈະເຮັດໃຫ້ຄວາມໄຝ່ຝັນ ອັນສັກກາລະຂອງຕົນ ເປັນຈິງນັ້ນ ຄືພົບເລນິນ. ເຊັ່ນດຽວກັນກັບບັນດາເພື່ອນໂຊວຽດ ກໍຄືຄົນຕ່າງປະເທດ ທີ່ເຮັດວຽກຮ່ວມກັນ ຢູ່ຄະນະບໍລິຫານງານສາກົນກອມມູນິດ, ຫງວຽນ ເຊື່ອໝັ້ນວ່າ ອາການເປັນອຳມະພາດຂອງ ເລນິນຈະທຸເລົາລົງ ແລະ ເພິ່ນ ຈະໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ ໕ ຂອງສາກົນກອມມູນິດ ທີ່ຈະມາເຖິງນີ້. ຢູ່ກອງປະຊຸມໃຫຍ່ສາກົນຂອງຊາວນາ ທີ່ຈັດຂຶ້ນຢູ່ຫ້ອງ ອັງດະເຣແອັບສະກີ ໃນວັງກະເຣັມແລັງ, ຫງວຽນພ້ອມດ້ວຍບັນດາຜູ້ແທນ ປິຕິຊົມຊື່ນທີ່ສຸດເມື່ອພວກເຂົາເຈົ້າໄດ້ຮັບແຈ້ງຂ່າວວ່າ ສຸຂະພາບຂອງ ເລນິນ ດີຂຶ້ນ, ເພິ່ນຍ່າງໄປມາກໍໄດ້ແລ້ວ, ພວກທ່ານໝໍ ກໍອະນຸຍາດໃຫ້ເພິ່ນອ່ານໜັງສືພິມໄດ້ແລ້ວ. ແຕ່ສອງສາມອາທິດຈາກນັ້ນມາ ປະກົດວ່າອາການທຸເລົາດັ່ງກ່າວເປັນພຽງອາການຊົ່ວຄາວເທົ່ານັ້ນ. ວັນທີ ໒໑ ເດືອນ ມັງກອນ ປີ ໑໙໒໔, ຂ່າວເສົ້າສະຫລົດໃຈ ໄດ້ສົ່ງມາຮອດມົດສະກູ: ເລນິນ ສິ້ນຊີວິດ ເສຍແລ້ວ !

ໂຮ່ຈິມິນ ໄດ້ທວນຄືນເຖິງວັນເຫລົ່ານັ້ນດັ່ງນີ້: "ພວກເຮົາໄດ້ຮັບຂ່າວວ່າ ເລ-

ນິນ ເຖິງແກ່ອະສັນຍະກຳ ໃນຂະນະທີ່ພວກເຮົາກຳລັງນັ່ງກິນເຂົ້າເຊົ້າຄືທຳມະດາ ຢູ່ຫ້ອງອາຫານຊັ້ນລຸ່ມຂອງໂຮມແຮມ. ບໍ່ມີໃຜເຊື່ອ ແຕ່ເມື່ອແນມເບິ່ງຂ້າງນອກໂຮງແຮມຈຶ່ງເຫັນວ່າສຳນັກງານສະພາໂຊວຽດເມືອງມົດສະກູ ລົດທຸງລົງເຄິ່ງເສົາເພື່ອໄວ້ອາໄລ ພວກເຮົາທັງຫມົດເຕັມໄປດ້ວຍຄວາມເສົ້າສະຫລົດໃຈຫລາຍທີ່ສຸດ. ເລນິນ ໄດ້ຈາກໄປແລ້ວ ! ຂ້າພະເຈົ້າຍັງບໍ່ທັນໄດ້ພົບ ເລນິນ ເທື່ອໃນຄາວທີ່ເພິ່ນຍັງມີຊີວິດນັ້ນຖືວ່າເປັນຄວາມເສຍໃຈຕະຫລອດຊີວິດຂ້າພະເຈົ້າ..."

ຫວຽນອາຍກວັກ ແມ່ນຫນຶ່ງໃນບັນດາພະນັກງານຄົນທຳອິດຂອງສາກົນ ກອມມູນິດ ທີ່ໄດ້ເຂົ້າໄປໃນຫ້ອງ ໂກໂລນີຍ ຂອງທີ່ປະຊຸມກຳມະບານ ເພື່ອໄວ້ອາໄລ ຜູ້ນຳຂອງຊົນຊັ້ນກຳມາຊີບທົ່ວໂລກ ທີ່ຈາກໄປຕະຫລອດການ. ແກກມາແມດໂຕຫວນຄືນວ່າ:

"ມົດສະກູ ເດືອນ ມັງກອນ ປີ ໑໙໒໔, ລະດູຫນາວຂອງປະເທດລັດເຊຍ ມີອາກາດຫນາວຈັດ, ບາງຄັ້ງຄາວອາກາດຫນາວຈັດລົບ ໔໐ ອົງສາ ເລນິນ ສິ້ນຊີວິດຫວ່າງບໍ່ເທົ່າໃດວັນມານີ້.

ໃນຕອນເຊົ້າວັນນັ້ນ ມີສຽງເຄາະປະຕູຫ້ອງຂອງພວກຂ້າພະເຈົ້າຄ່ອຍໆຢູ່ທີ່ໂຮງແຮມ "ລູກ". ຊາຍຫນຸ່ມຄີງບາງ ກ້າວເຂົ້າມາ ແລະ ເວົ້າວ່າ:

"ຂ້ອຍຄືຫວຽນອາຍກວັກ, ເປັນຄົນຫວຽດນາມ. ດຽວນີ້ຂ້ອຍຢາກເຂົ້າໄປໄວ້ອາໄລເຖິງ ເລນິນ..."

"ສະຫາຍ ອາຍກວັກ, ສະຫາຍນຸ່ງຫົ່ມບາງໆຄືຈັ່ງຊີ້ຈະທົນກັບຄວາມຫນາວ ລັດເຊຍບໍ່ໄດ້ດອກ. ຂໍໃຫ້ສະຫາຍຖ້າໄປຮອດມື້ອື່ນເສຍກ່ອນ ເມື່ອມີເຄື່ອງນຸ່ງຫົ່ມອຸ່ນແລ້ວຈຶ່ງໄປ...

ອາຍກວັກ ຫາຍໃຈບາດຍາວໆ, ບໍ່ຕອບຫຍັງ ມີແຕ່ນັ່ງດື່ມນ້ຳຊາຮ່ວມກັບ ພວກຂ້າພະເຈົ້າ, ຈາກນັ້ນກໍກັບໄປຫ້ອງນອນຂອງເພິ່ນ. ພວກຂ້າພະເຈົ້າຄິດວ່າ: ເພິ່ນຍອມຟັງພວກເຮົາ ແລະ ບໍ່ໄປໃສ.

...ປະມານ ໑໐ ໂມງກາງຄືນ, ມີສຽງເຄາະປະຕູເບົາໆອີກ. ຂ້າພະເຈົ້າຍ່າງອອກໄປເປີດປະຕູ: ຕໍ່ຫນ້າຂ້າພະເຈົ້າຄືສະຫາຍອາຍກວັກ...ສີຫນ້າສະຫາຍຈືດ, ນິ້ວມື,ດັງ ແລະ ຫູ ຊ້ຳຍ້ອນຄວາມຫນາວຈັດໂພດ.

"ຂ້ອຍຫາກໍກັບຈາກໄປໄວ້ອາໄລເຖິງ ເລນິນ", ອາຍກວັກ ທັງເວົ້າ ທັງສັ່ນ

ໜາວທິດໆ." ຂ້ອຍບໍ່ອາດລໍໄປຮອດມື້ອື່ນເພື່ອໄວ້ອາໄລເຖິງເພື່ອນຍິງໃຫຍ່ທີ່ສຸດ ຂອງປະຊາຊົນບັນດາປະຊາຊາດເມືອງຂຶ້ນໄດ້ດອກ...ສະຫາຍຍັງມີນ້ຳຊາຮ້ອນແດ່ບໍ ?"

...ສອງສາມສິບປີຕໍ່ມາ ຢູ່ປ່າຕຶບດົງໜາຫວຽດບັກ ໃນເວລາຢຸດນັ່ງ ພັກຜ່ອນໃນການເດີນທາງອັນຍາວໄກ ມີສະຫາຍຄົນໜຶ່ງໄດ້ຖາມ ໂຮ່ຈີມິນວ່າ ເປັນຫຍັງ ໃບຫູແລະ ນິ້ວຕີນຂອງເພິ່ນ ຈຶ່ງມີຮອຍຊ້ຳດຳຈັ່ງຊີ້. ເພິ່ນກໍເລົ່າເຖິງວັນ ເສົ້າສະຫລົດໃຈຂອງປີ ໑໙໔໕ ໃນເວລານັ້ນເພິ່ນບໍ່ເອົາຫົວຊານຳຄວາມໜາວຈັດຂອງປະເທດລັດເຊຍການນຸ່ງຖື່ມກໍບໍ່ໜາພໍ, ຢືນລຽນແຖວເກືອບຕະຫລອດວັນຢູ່ໃກ້ທາງເຂົ້າຫໍປະຊຸມ ກຳມະບານ ເພື່ອໄວ້ອາໄລເຖິງ ເລນິນ ຜູ້ຍິ່ງໃຫຍ່.

ວັນທີ ໒໗ ເດືອນມັງກອນ. ພິທີສົ່ງສະການ ວ.ອີ.ເລນິນ ຖືກຈັດຂຶ້ນຢູ່ທີ່ ສະໜາມແດງ. ໃນວັນດັ່ງກ່າວ, ອາກາດໜາວເຢັນເຂົ້າກະດູກ ເໝືອນກັບວ່າ ໝາກຫົວໃຈຂອງຟ້າດິນກໍໜາວຈັດ ຍ້ອນຄວາມເສົ້າສະຫລົດໃຈ. ຄວັນໄຟທີ່ເກີດຈາກ ກອງໄຟຢູ່ຕາມທາງສີ່ແຍກຂອງມົດສະກູ, ໄດ້ກ້ຽວກອດກັນເປັນປຸ້ມເປັນໂງ່ນປິວຂຶ້ນສູ່ທ້ອງຟ້າ. ສຽງປືນໃຫຍ່ດັງກ້ອງຢູ່ເໜືອສະໜາມແດງ. ສຽງຫວູດທີ່ໜ້າສະຫລົດໃຈຂອງລົດໄຟ, ໂຮງຈັກໂຮງງານດັງຂຶ້ນຢູ່ເທິງຫົວຂອງຝູງຊົນເປັນໝື່ນໆທີ່ງຽບສະງັດ, ໃບໜ້າ ຂອງພວກເຂົາເຈົ້າເຕັມໄປດ້ວຍນ້ຳໝອກເຢັນ. ວິທະຍຸກະຈາຍສຽງກໍ ກະຈາຍ ຄຳເວົ້າ ທີ່ເສົ້າສະຫລົດໃຈວ່າ: "ບັນດາສະຫາຍ ! ຈົ່ງລຸກຢືນຂຶ້ນ, ກົ້ມຫົວໄວ້ອາໄລເຖິງ ເລນິນ". ໂຮງຈັກ, ສຳນັກງານທົ່ວປະເທດຈົ່ງຢຸດເຄື່ອນໄຫວວຽກງານຫ້ານາທີ, ລົດໂອໂຕ, ລົດໄຟຈົ່ງເຊົາເຄື່ອນໄຫວວຽກງານເຊັ່ນກັນ. ຈາກນັ້ນສຽງຫວູດກໍມິດງຽບ,ສຽງໂຄສົກວິທະຍຸດັງຂຶ້ນອີກວ່າ: "ເລນິນ ໄດ້ຈາກໄປແລ້ວ ແຕ່ລັດທິ ເລນິນ ຍັງຍືນຍົງຕະຫລອດການ!".

ຄວາມເວົ້າເຫລົ່ານັ້ນ ຍັງດັງກ້ອງຢູ່ໃນຈິດໃຈຂອງ ຫງວຽນອາຍກວັກ ເປັນເວລາດົນນານ. ໃນມື້ດຽວກັນນັ້ນ ຫລັງຈາກກັບຈາກຫໍປະຊຸມກຳມະບານ ເພິ່ນຂັງຕົນເອງຢູ່ໃນຫ້ອງສ່ວນຕົວ ລໍຖ້າຈົນວ່າມີຊຸ່ມຂຶ້ນພໍຈະຈັບປາກກາໄດ້ ເພິ່ນຈຶ່ງຂຽນຢ່າງລືມຕົວຈົນຮອດທ່ຽງຄືນ. ເພິ່ນພະຍາຍາມລະບາຍຄວາມຮູ້ສຶກເສົ້າໂສກອັນເລິກເຊິ່ງລົງເທິງໜ້າເຈ້ຍ. ໃນຂະນະທີ່ເພິ່ນຂຽນ ນ້ຳຕາກໍໄຫລອອກເທິງພວງແກ້ມທີ່ໜາວເຢັນ.

"ເລນິນ ໄດ້ເສຍຊີວິດແລ້ວ ! ເໝືອນກັບຟ້າຜ່າໃນມື້ທີ່ບໍ່ມີເມກຝົນ ຂ່າວນີ້ໄດ້ແຜ່ກະຈາຍໄປທົ່ວທົ່ງພຽງອັນອຸດົມສົມບູນຢູ່ທະວີບອາຟະລິກາແລະທົ່ງນາຂຽວອຸ່ມໝຸ່ມຢູ່ທະ

ວິບອາຈິ. ແນ່ນອນ, ຄົນຜິວດຳ ແລະ ຄົນຜິວເຫລືອງ ຍັງບໍ່ທັນຮູ້ແຈ້ງວ່າ ເລນິນ ຄື ໃຜ, ປະເທດລັດເຊຍຕັ້ງຢູ່ໃສ...ແຕ່ເຂົາເຈົ້າທັງຫມົດ, ນັບຕັ້ງແຕ່ຊາວນາຫວຽດ - ນາມ ໄປຈົນຮອດຄົນລ່າສັດຢູ່ໃນປ່າດາໂກໄມ ກໍຕັ້ງໃຈຟັງຄວາມເວົ້າທີ່ວ່າ ຢູ່ສຸດຂອບ ຟ້າໄກແສນໂຍດ ໄດ້ມີຊາດຫນຶ່ງໄດ້ຂັບໄລ່ພວກຂູດຮີດປະຊາຊົນ... ປະເທດ ນັ້ນແມ່ນປະເທດລັດເຊຍ ທີ່ມີຜູ້ນຳພາເປັນຄົນເກັ່ງກ້າ ແລະ ຜູ້ເກັ່ງກ້າກວ່າຫມູ່ ມີຊື່ວ່າ ເລນິນ".

ຫວຽນອາຍກວັກ ຖາມຕົນເອງວ່າ: ເມື່ອ ເລນິນ ເສຍຊີວິດແລ້ວ ຊາຕາກຳ ຂອງພວກເຮົາຈະເປັນແນວໃດ ? ຄິດວ່າຍັງມີຄົນເກັ່ງກ້າ ແລະ ຈິດໃຈກວ້າງຂວາງຄື ເລນິນ ທີ່ອຸທິດກຳລັງຂອງຕົນໃຫ້ແກ່ພາລະກິດປົດປ່ອຍແຮງງານອອກຈາກການກົດຂີ່ຂອງ ພວກນາຍທຶນ ຫລືບໍ່ ? ເພິ່ນກໍຕອບດ້ວຍຄວາມເຊື່ອໝັ້ນວ່າ: ຍັງມີຄົນປະເພດນີ້ ຢ່າງ ຫລວງຫລາຍ. ເພິ່ນຈຶ່ງຂຽນຕໍ່ວ່າ: "ພວກເຮົາກໍ່ເຊື່ອຫມັ້ນວ່າ ສາກົນກອມມູນິດ ແລະ ບັນດາພະແນກຂອງອົງການດັ່ງກ່າວ ນັບທັງພະແນກຢູ່ໃນບັນດາປະເທດເມືອງຂຶ້ນ,ຕ້ອງ ຮັດໃຫ້ບົດຮຽນ ແລະ ຄຳສັ່ງສອນຈຳຊຶ່ງທ່ານຜູ້ນຳໄດ້ປະໄວ້ແກ່ພວກເຮົາ ນັ້ນປະກົດເປັນຈິງ. ການປະຕິບັດຕາມທຸກສິ່ງທຸກຢ່າງທີ່ເພິ່ນປະໄວ້ເປັນມູນມໍລະດົກແກ່ພວກເຮົາ ຈົນສຳເລັດ ຜົນນັ້ນ ຈະບໍ່ເປັນການພິສູດໃຫ້ເຫັນເຖິງຄວາມຮັກຂອງພວກເຮົາ ທີ່ມີຕໍ່ເພິ່ນ ຈັ່ງບໍ ?

ເມື່ອຍັງມີຊີວິດ ເພິ່ນແມ່ນພໍ່, ອາຈານ, ສະຫາຍ ແລະ ທີ່ປຶກສາ ຂອງພວກ ເຮົາ. ປະຈຸບັນ ເພິ່ນປຽບເຫມືອນດາວທີ່ເຍືອງທາງແກ່ພວກເຮົາໄປເຖິງການປະຕິວັດ ສັງຄົມ. ເລນິນ ຍືນຍົງຕະຫລອດການໃນພາລະກິດຂອງພວກເຮົາ".

ວັນທີ ໒໗ ເດືອນມັງກອນ ປີ ໑໙໒໔, ທ່ານກາງບົດຂຽນຕອບໂຕ້ອັນຫລວງ - ຫລາຍຂອງບັນດາເພື່ອນມິດຕ່າງປະເທດທີ່ຂຽນກ່ຽວກັບ ເລນິນ ແລະ ທີ່ໄດ້ລົງພິມຢູ່ໃນ ຫນັງສືພິມ "ປຣາວະດາ", ກໍຍັງມີບົດຄວາມຂອງເພິ່ນ ໂດຍໃສ່ນາມປາກກາວ່າຫວຽນ ອາຍກວັກ ສະມາຊິກລະນະປະທານຂອງສະພາຊາວນາສາກົນ.

ໃນເວລາຕໍ່ມາ ຢູ່ໃນບົດ "ເລນິນ ກັບ ຕາເວັນອອກ" ທີ່ລົງພິມ ຢູ່ຫນັງສືພິມ "ສຽງຫວູດ" ເນື່ອງໃນໂອກາດລະລຶກວັນຄົບຮອບ ປີທີສອງແຫ່ງມໍລະນະກຳຂອງ ວ.ອີ. ເລນິນ ຫວຽນອາຍກວັກ ໄດ້ໃຫ້ຄຳອະທິບາຍຢ່າງກວ້າງຂວາງກ່ຽວກັບ ຄວາມຫມາຍ ລະດັບສາກົນຂອງລັດທິ ເລນິນ, ກ່ຽວກັບລັກສະນະໃຊ້ໄດ້ທົ່ວໄປ ຂອງທິດສະດີປະຕິວັດ ອັນແທ້ຈິງນີ້. ເພິ່ນໄດ້ໃຫ້ຂໍ້ສັງເກດວ່າ ການປະກົດຕົວຂອງລັດທິ ເລນິນມີຄວາມຫມາຍ

ອັນສຳຄັນ ແລະ ມີຄຸນຄ່າເປັນພິເສດ ສຳລັບບັນດາປະຊາຊາດເມືອງຂຶ້ນ. ໂດຍຢືນ ຢູ່ບົນທັດສະນະຂອງທິດສະດີດັ່ງກ່າວ ບັນດາປະຊາຊາດປະເທດເມືອງຂຶ້ນ ໄດ້ມອງເຫັນອະນາຄົດອັນສວຍງາມ ເຊິ່ງໄດ້ແກ່ສັງຄົມນິຍົມ ແລະ ເຊື່ອໝັ້ນໃນອະນາຄົດ ດັ່ງກ່າວຢ່າງເຕັມປ່ຽມ. ຫງວຽນອາຍກວັກ ຂຽນວ່າ: "ເລນິນ ໄດ້ໄຂສັງກາດໃໝ່ໝື່ລົກສະນະປະຕິວັດອັນແທ້ຈິງຂຶ້ນຢູ່ໃນບັນດາປະເທດເມືອງຂຶ້ນ". ...ເລນິນເປັນຄົນທຳອິດ ທີ່ໄດ້ເຂົ້າໃຈ ແລະ ເນັ້ນໜັກວ່າ ການແກ້ໄຂບັນຫາເມືອງຂຶ້ນຢ່າງຖືກຕ້ອງ ມີຄວາມສຳຄັນອັນຍິ່ງໃຫຍ່ສຳລັບການປະຕິວັດໂລກ...ເລນິນເປັນຄົນທຳອິດທີ່ເຂົ້າໃຈ ແລະ ເນັ້ນໜັກເຖິງຄວາມສຳຄັນອັນຍິ່ງໃຫຍ່ຂອງການດຶງດູດເອົາປະຊາຊົນບັນດາປະເທດເມືອງ-ຂຶ້ນໃຫ້ເຂົ້າຮ່ວມໃນຂະບວນການປະຕິວັດ. ເລນິນເປັນຄົນທຳອິດທີ່ເຂົ້າໃຈວ່າ ຖ້າບໍ່ມີປະຊາຊົນບັນດາປະເທດເມືອງຂຶ້ນເຂົ້າຮ່ວມແລ້ວ ກໍບໍ່ອາດມີການປະຕິວັດສັງຄົມ...

ດ້ວຍຄວາມປີຊາສາມາດໃນການຄາດຄະເນເຫດການຂອງອະນາຄົດ, ເລນິນ ເຂົ້າໃຈວ່າວຽກງານໃນບັນດາປະເທດເມືອງຂຶ້ນຈະສຳເລັດຜົນໄດ້ ຕ້ອງໝູນໃຊ້ ຂະບວນການປົດປ່ອຍຊາດ ເຊິ່ງກຳລັງຂະຫຍາຍຕົວຢູ່ໃນບັນດາປະເທດເຫຼົ່ານັ້ນຢ່າງເຕັມປ່ຽມ, ແລະ ຖ້າວ່າຊົນຊັ້ນກຳມະຊີບໃນໂລກສະໜັບສະໜູນຂະບວນການນີ້ ພວກເຂົາເຈົ້າຈະມີພັນທະມິດຜູ້ໃໝ່ໝື່ກຳລັງແຮງຢູ່ໃນການຕໍ່ສູ້ຂອງເຂົາເຈົ້າ ເພື່ອການປະຕິວັດສັງຄົມ".

ໂດຍພະຍາຍາມເຂົ້າໃຈວ່າ ເປັນຫຍັງ ເລນິນ ຈິ່ງມີຄວາມຍິ່ງໃຫຍ່ ແລະ ມີແຮງດຶງດູດທີ່ຫາຍາກ ບໍ່ພຽງແຕ່ໃນຖານະເປັນນັກປະຕິວັດ, ນັກຮົບ, ຜູ້ນຳ ເທົ່ານັ້ນ ແຕ່ຫາກຍັງໃນຖານະເປັນຄົນທຳມະດາອີກດ້ວຍນັ້ນ, ຫງວຽນອາຍກວັກ ຈຶ່ງຊອກ ອ່ານບັນດາບົດນິພົນຂອງ ເລນິນ, ບັນທຶກຄວາມຊົງຈຳຂອງເພື່ອນຮ່ວມຮົບຂອງເພິ່ນ ແລະສໍ້ຖາມນຳຜູ້ທີ່ເຄີຍເຮັດວຽກນຳເພິ່ນ. ຫງວຽນອາຍກວັກ ຮູ້ສຶກແປກປະຫລາດໃຈທີ່ສຸດ ເມື່ອສັງເກດເຫັນວ່າ ທັງຊີວິດ ແລະ ການເຄື່ອນໄຫວຂອງ ເລນິນ ສອດຄ່ອງ ເຖິງຂັ້ນໃດກັບ "ມະນຸດຜູ້ປະເສີດ" ຊຶ່ງເພິ່ນເຄີຍວາດພາບໃນຈິດສຳນຶກຂອງຕົນແຕ່ສະໄໝຍັງເຍົາໄວ. ຫງວຽນອາຍກວັກ ໄດ້ຂຽນຈົດໝາຍສະບັບໜຶ່ງສົ່ງໄປຫາໝູ່ໃນກອງບັນນາທິການໜັງສືພິມ "ປາຣີຢາ" ດັ່ງຕໍ່ໄປນີ້: "ສິ່ງທີ່ເຮັດໃຫ້ ເລນິນ ໄດ້ຮັບຄວາມຮັກແພງ ແລະ ດຶງດູດໃຈຈາກປະຊາຊາດອາຊີນັ້ນ ບໍ່ພຽງແຕ່ຄວາມປີຊາສາມາດຂອງເພິ່ນເທົ່ານັ້ນ ແຕ່ຫາກຍັງນັບທັງຄວາມຊີງຊັງຄວາມຟູມເຟືອຍ, ນ້ຳໃຈຮັກອອກແຮງງານ ,

ການດຳລົງຊີວິດທີ່ປອດໃສ, ຄວາມງ່າຍດາຍ".

ຄົນໃນຊຸດົມຄະຕິຂອງເລນິນ ໄດ້ກາຍເປັນດວງດາວທີ່ເຍືອງທາງໃຫ້ແກ່ຫວຽນ ອາຍກວັກ. ແຕ່ຄາວຍັງເດັກ ພໍ່ຂອງເພິ່ນໄດ້ສັ່ງສອນໃຫ້ເຄົາລົບນັບຖືຫລັກສິນທຳ ແລະ ຈັນຍາທຳອັນສູງສົ່ງ ຊຶ່ງຄົນຜູ້ມີຄຸນນະທຳອັນແທ້ຈິງ ຄວນຖືໄວ້ຢູ່ໃນຈິດໃຈ ໃນຂະນະທີ່ດຳເນີນການເຄື່ອນໄຫວປະຕິວັດ ແລະ ເນື່ອງມາຈາກການສຶກສາຄົ້ນຄວ້າບົດຮຽນຂອງເລນິນ, ຫລັກສິນທຳດັ່ງກ່າວ ໄດ້ສົມທົບເຂົ້າກັບຄວາມເຂັ້ມງວດ ແຫ່ງຄຸນສົມບັດປະຕິວັດ, ສຸດທ້າຍ ທັງໝົດນີ້ຊ່ວຍໃຫ້ເພິ່ນສາມາດສ້າງຄຸນນະລັກສະນະອັນປະເສີດໃຫ້ແກ່ຕົນເອງໄດ້. ຄຸນນະລັກສະນະດັ່ງກ່າວຊ່ວຍໃຫ້ເພິ່ນເປັນຜູ້ນຳບໍ່ພຽງແຕ່ທາງດ້ານ ການເມືອງ ກໍຄືທາງດ້ານຄຸນສົມບັດ ຂອງຂະບວນການປົດປ່ອຍຊາດຫວຽດນາມ, ຂອງຊົນຊັ້ນປະຕິວັດໃໝ່ທີ່ກຳລັງກຳເນີດຂຶ້ນຢູ່ຫວຽດນາມ ອັນໄດ້ແກ່ຊົນຊັ້ນກຳມາຊີບ ແລະຂອງກອງລະວັງໜ້າຂອງຊົນຊັ້ນກຳມາຊີບອັນໄດ້ແກ່ພັກກອມມູນິດ. ຕໍ່ຈາກນັ້ນມາ, ໃນບົດນິພົນກ່ຽວກັບບັນຫາອົບຮົມຄຸນສົມບັດປະຕິວັດໃຫ້ແກ່ບັນດານັກກອມມູນິດຫວຽດນາມ, ໃນບັນດາບົດປາໄສ ແລະ ບົດໂອ້ລົມ, ໂຮ່ຈີມິນ ໄດ້ຮຽກຮ້ອງຢ່າງໜັກແໜ້ນ ໃຫ້ເຂົາເຈົ້າຕ້ອງເດີນໄປຕາມແບບຢ່າງຂອງເລນິນບໍ່ວ່າຈະຢູ່ໃນຊີວິດປະຈຳວັນກໍຄືຢູ່ໃນການຕໍ່ສູ້ປະຕິວັດ.

ກ່ອນເຖິງແກ່ອະສັນຍະກຳບໍ່ເທົ່າໃດປີ, ເມື່ອເວລາໃຫ້ສຳພາດຕໍ່ນັກສື່ຂ່າວໜັງສືພິມ "ຊຸຍມານິເຕ" ເນື່ອງໃນໂອກາດລະລຶກວັນເກີດຂອງ ວ.ອີ.ເລນິນຄົບຮອບ໑໐໐ປີ ທີ່ຈະວຽນມາຮອດ, ໂຮ່ຈີມິນ ໄດ້ເວົ້າກ່ຽວກັບອາຈານຂອງເພິ່ນດັ່ງຕໍ່ໄປນີ້ວ່າ:"ໃນສາຍຕາຂອງບັນດາປະຊາຊາດຝ່າຍຕາເວັນອອກ ເລນິນ ບໍ່ພຽງແຕ່ເປັນຜູ້ນຳຄົນໜຶ່ງ, ຫືວໜ້າຄົນໜຶ່ງເທົ່ານັ້ນ, ແຕ່ຫາກຍັງເປັນຄົນຜູ້ໜຶ່ງທີ່ມີກຳລັງດົງດູດ... ຄວາມເຄົາລົບທີ່ພວກຂ້າພະເຈົ້າມີຕໍ່ເພິ່ນ ແມ່ນຄວາມເຄົາລົບຂອງຜູ້ເປັນບຸດທີ່ມີຕໍ່ບິດາ, ນັ້ນຄືໜຶ່ງໃນບັນດາຄຸນສົມບັດພື້ນຖານຢູ່ປະເທດພວກຂ້າພະເຈົ້າ. ສຳລັບພວກຂ້າພະເຈົ້າຊຶ່ງເປັນຄົນທີ່ໄດ້ຮັບຄວາມທຸກທໍລະມານ ທີ່ຖືກປຽບຢ່ຳກຽດສັກສີ ເລນິນ ເປັນແບບຢ່າງແຫ່ງພາລະດອນພາບອັນແທ້ຈິງ.

ແນ່ນອນວ່າ ສິ່ງສຳຄັນທີ່ຫວຽນອາຍກວັກ ຊອກຫາໃນບັນດາບົດນິພົນຂອງ ເລນິນ ແມ່ນຄຳຕອບຕໍ່ບັນຫາ ທີ່ມີຈຳນວນຫລວງຫລາຍກ່ຽວກັບການຂະຫຍາຍຕົວ ຂອງຂະບວນການປົດປ່ອຍຊາດຢູ່ອິນດູຈີນ. ເພິ່ນປາດຖະໜາຢາກຄົ້ນຄວ້າຢ່າງຖີ່ຖ້ວນ ໝົດທຸກ

ຢ່າງທີ່ ເລນິນ ໄດ້ຂຽນ, ໄດ້ເວົ້າ ກ່ຽວກັບບັນຫາເມືອງຂຶ້ນ. ເວລານັ້ນບໍ່ແມ່ນເລື່ອງງ່າຍທີ່ຈະຫາບົດນິພົນຈຳນວນໜຶ່ງຂອງ ເລນິນ, ເພາະວ່າປຶ້ມທີ່ແປເປັນພາສາຕ່າງປະເທດ ມີໜ້ອຍທີ່ສຸດ. ເພິ່ນຕ້ອງໃຊ້ເວລາຫລາຍຄົ້ນຄວ້າຢູ່ໃນຫ້ອງສະໝຸດ, ນອກນັ້ນ ໂດຍການຊ່ວຍເຫລືອ ຂອງສະຫາຍລັດເຊຍເພິ່ນຈຶ່ງເລືອກປຶ້ມທີ່ຕ້ອງການ ເຊິ່ງຮັກສາໄວ້ຢູ່ທີ່ຄະນະເລຂາຂອງຄະນະບໍລິຫານງານສາກົນກອມມູນິດ. ຢູ່ໃນບັນທຶກຂອງເພິ່ນ ມີແຕ່ບັນດາຂໍ້ຄວາມຖອດອອກຈາກບົດນິພົນຂອງ ເລນິນ ແລະບັນດາຄຳຄິດຄຳເຫັນສ່ວນຕົວຂອງເພິ່ນ. ຈາກນີ້ສິ່ງເຫລົ່ານີ້ຈຶ່ງກາຍເປັນພື້ນຖານໃຫ້ແກ່ປຶ້ມເຫລັ້ມໃໝ່ ຂອງເພິ່ນ ກ່ຽວກັບເສັ້ນທາງຂອງການປະຕິວັດຫວຽດນາມ.

ບັນດາຂີດໝາຍແຕ່ງເສັ້ນທາງອັນຖືກຕ້ອງກໍຄ່ອຍໆກາຍເປັນສິ່ງທີ່ຈະແຈ້ງ ແລະ ເດັ່ນຊັດຂຶ້ນໃນຈິດໃຈເພິ່ນ. ຕາມຄວາມນຶກຄິດຂອງເພິ່ນນັ້ນ, ຢູ່ບັນດາປະເທດ ເມືອງຂຶ້ນ ແລະ ປະເທດບໍ່ມີເອກະລາດ ການປະຕິວັດ ກ່ອນອື່ນໝົດ ຕ້ອງແມ່ນການປະຕິວັດຂອງຊາວນາ ທີ່ສູ້ມປາຍຫອກໃສ່ພວກລ່າເມືອງຂຶ້ນ ແລະ ສັກດີນາ. ພັນທະພາບ ລະຫວ່າງຊາວນາສ່ວນໃຫຍ່ກັບ ຊົນຊັ້ນກຳມະກອນ ແມ່ນພື້ນຖານອັນໜຶ່ງອັນດຽວເພື່ອສ້າງຕັ້ງແນວໂຮມແຫ່ງຊາດອັນກວ້າງຂວາງ ແລະ ແໜ້ນແກ່ນ. ແຕ່ຊາວນາ ຢູ່ບັນດາປະເທດເມືອງຂຶ້ນຊ້ຳພັດແມ່ນກ້ອນກຸ່ມມະຫາຊົນທີ່ໂງ່ຈ້າ ແລະ ຫວາດຫວັ່ນ. ດັ່ງນັ້ນ, ຈຳເປັນຕ້ອງມີພັກປະຕິວັດ, ພັກຂອງຊາວກອມມູນິດທີ່ຮູ້ຈັກ ດຳເນີນວຽກງານການເມືອງ ແລະ ຈັດຕັ້ງໃນໝູ່ຊາວນາຢ່າງເປັນປົກກະຕິ. ຖ້າບໍ່ດຳເນີນວຽກງານດັ່ງກ່າວແລ້ວໄຊຊະນະຂອງການປະຕິວັດກໍຈະບໍ່ຮັບປະກັນ. ການເຂົ້າໃຈຕາມແບບ ເລນິນ ກ່ຽວກັບລັກສະນະສະເພາະຂອງບັນດາເງື່ອນໄຂສັງຄົມ-ການເມືອງ ຢູ່ບັນດາປະເທດເມືອງຂຶ້ນ , ກ່ຽວກັບຄວາມສຳຄັນຂັ້ນພື້ນຖານຂອງການແກ້ໄຂບັນຫາຊາວນາໃຫ້ຖືກຕ້ອງ ໄດ້ຊ່ວຍພັກກອມມູນິດຫວຽດນາມໃຫ້ດຶງດູດເອົາປະຊາຊົນເປັນສ່ວນໃຫຍ່ທີ່ສຸດຂອງປະເທດ ໄປນຳ ແລະ ຮັບປະກັນໃຫ້ການປະຕິວັດເດືອນສິງຫາ ປີ ໑໙໔໕ ມີໄຊໄດ້.

໓

ຢູ່ມົດສະກູ ຫງວຽນອາຍກວັກ ມີເງື່ອນໄຂສ້າງລະບົບໃຫ້ແກ່ຄວາມຮູ້ ທາງດ້ານ

ທິດສະດີປະຕິວັດ ຊຶ່ງເພິ່ນມີມາແລ້ວໃນຊຸມປີທີ່ເພິ່ນເຮັດວຽກຢູ່ພັກກອມມູນິດຝະລັ່ງ ແລະ ຈາກການຄົ້ນຄວ້າບັນດາບົດນິພົນຂອງ ເລນິນ ແລະ ບັນດາເອກະສານຕ່າງໆຂອງ ສາກົນກອມມູນິດ. ຄຽງຄູ່ກັບວຽກງານຢູ່ທີ່ພະແນກຕາເວັນອອກຂອງຄະນະບໍລິຫານງານຂອງ ສາກົນກອມມູນິດນັ້ນ ຫງວຽນອາຍກວັກ ຍັງມີໂອກາດເຂົ້າຊຸດຮຽນໄລຍະສັ້ນຢູ່ມະຫາວິ-ທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານຂອງຕາເວັນອອກຊຶ່ງເປີດສອນ ໃຫ້ແກ່ ຊາວຜູ້ອອກແຮງງານຂອງຕາເວັນອອກ.

ນັ້ນແມ່ນໜຶ່ງໃນບັນດາໂຮງຮຽນການເມືອງທຳອິດຢູ່ປະເທດໂຊວຽດລັດເຊຍ . ທາງໂຮງຮຽນເປີດສອນໃນປີ ໑໙໒໑ ຕາມຄຳສັ່ງຂອງ ວ.ອີ.ເລນິນ. ໜ້າທີ່ຂອງມະຫາວິທະຍາໄລແມ່ນກໍ່ສ້າງພະນັກງານປະຕິວັດທີ່ເລືອກເຟັ້ນມາຈາກຜູ້ຕາງໜ້າຂອງ ປະເທດຕາເວັນອອກ. ຂັ້ນຕົ້ນ ນັກຮຽນສ່ວນໃຫຍ່ແມ່ນຜູ້ຕາງໜ້າທີ່ມາຈາກບັນດາສາທາລະນະລັດອາຊີກາງ ແລະ ຟາກພູໂກກາດ. ຄຽງຄູ່ກັນນັ້ນຈຳນວນນັກຮຽນທີ່ມາຈາກບັນດານັກຮົບປະຕິວັດຕ່າງປະເທດ ໂດຍສະເພາະຈາກບັນດາປະເທດອາຊີ ນັບວັນ ຍິ່ງເພີ່ມຂຶ້ນ.

ນັບຕັ້ງແຕ່ມື້ຮຽນທຳອິດຢູ່ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານຂອງຕາເວັນອອກຫງວຽນອາຍກວັກ ເປັນຜູ້ສະໜັບສະໜູນ ແລະ ນັກໂຄສະນາ ຂົນຂວາຍກ່ຽວກັບມະຫາວິທະຍາໄລແຫ່ງນີ້ຢ່າງຕັ້ງໜ້າ. ເພິ່ນສົ່ງລາຍລະອຽດກ່ຽວກັບມະຫາວິທະຍາໄລແຫ່ງນີ້ໄປລົງພິມຢູ່ໃນໜັງສືພິມ "ລາ ວີ ອູວະຣິແຢ" ຢູ່ປາຣີ. ຕາມຄວາມເວົ້າຂອງເພິ່ນນັ້ນ, ມັນແມ່ນໂຮງຮຽນທີ່ໜ້າປະຫລາດ ທີ່ມີນັກຮຽນເປັນພັນໆ ກວ່າຄົນຊຶ່ງມາຈາກຫລາຍຊົນຊາດຕ່າງກັນ. ມະຫາວິທະຍາໄລມີຕຶກ ໙ ຫລັງ, ມີຫ້ອງສະໝຸດສອງແຫ່ງ, ມີໂຮງສາຍຮູບເງົາໜຶ່ງແຫ່ງ, ມີໂຮງໜໍໜຶ່ງຫລັງ, ມີຫໍພັກໜຶ່ງຫລັງ,ມີສະຖານທີ່ດຳເນີນເສດຖະກິດສຳຮອງໜຶ່ງແຫ່ງ ແລະ ມີເຮືອນພັກຜ່ອນຢູ່ ກະຣິມ ໜຶ່ງຫລັງ. ເພິ່ນຂຽນວ່າ: "ຊາວໂບນເຊວິກຈະບໍ່ຈຳກັດຕົນຢູ່ພຽງແຕ່ການອ່ານບົດປາໄສທີ່ມີແຕ່ທິດສະດີ ແລະ ການຜ່ານມະຕິອັນມີມະນຸດສະທຳກ່ຽວກັບບັນດາປະຊາຊາດທີ່ຖືກກົດຂີ່ເທົ່ານັ້ນ ແຕ່ຊ້ຳພັດສິດສອນປະຊາຊົນທີ່ຖືກຂູດຣີດເຫລົ່ານັ້ນໃຫ້ຮູ້ຈັກວິທີຕໍ່ສູ້...ເຖິງວ່າກຳລັງຢູ່ໃນໄລຍະພົບຂໍ້ຫຍຸ້ງຍາກຢູ່ພາຍໃນປະເທດ ແລະ ຢູ່ນອກປະເທດກໍຕາມ, ປະເທດລັດເຊຍປະຕິວັດບໍ່ໄດ້ລັ່ງເລໃຈຈັກດີ້ ໃນການຊ່ວຍເຫລືອບັນດາປະຊາຊາດທີ່ຖືກໄຊຊະນະຂອງການປະຕິວັດລັດເຊຍປຸກໃຫ້ຕື່ນຂຶ້ນຈາກການນອນຫລັບໄຫລອັນຍາວນານ .

ໜຶ່ງໃນບັນດາວຽກສຳຄັນອັນທຳອິດຂອງປະເທດລັດເຊຍກໍແມ່ນການສ້າງຕັ້ງມະຫາວິທະຍາໄລສຳລັບຊາວຜູ້ອອກແຮງງານຂອງຕາເວັນອອກ".

ໃນວັນທີ ໑໕ ເດືອນມີນາ ປີ ໑໙໒໔, ໃນໜັງສືພິມ "ອູນີຕາ" ທີ່ເປັນ ກະບອກສຽງຂອງພັກກອມມູນິດ ອີຕາລີ ໄດ້ລົງພິມບົດຄວາມຂອງ ແກ໊ກມາແນດໂຕ ເຊິ່ງໃນນັ້ນເພິ່ນເລົ່າເລື່ອງມະຫາວິທະຍາໄລສຳລັບຊາວຜູ້ອອກແຮງງານ ຂອງຕາເວັນອອກ ແລະ ນັກຮຽນຄົນທຳອິດຂອງອິນດູຈີນ ໃນແບບສົນທະນາ. ຫງວຽນອາຍກວັກ ເວົ້າສູ່ເພື່ອນມິດ ອີຕາລີ ຟັງວ່າ:

"ການສ້າງຕັ້ງມະຫາວິທະຍາໄລໂບນເຊວິກ ແມ່ນໄດ້ໄຂສັງກາດໃໝ່ ອັນໜຶ່ງໃນປະຫວັດສາດຂອງບັນດາປະຊາຊາດເມືອງຂຶ້ນຢູ່ພາກຕາເວັນອອກ. ມະແຫງນີ້ ພວກເຮົາຮຽນຮູ້ຫຼັກການຕໍ່ສູ້ຊົນຊັ້ນ, ມະແຫງນີ້ ພວກເຮົາສ້າງຕັ້ງການພົວພັນກັບບັນດາປະຊາຊາດພາກຕາເວັນຕົກ. ມະຫາວິທະຍາໄລໄດ້ປະກອບຄວາມຮູ້ກ່ຽວກັບສິ່ງທີ່ຈະຕ້ອງປະຕິບັດເປັນຄືອາວຸດໃຫ້ແກ່ພວກເຮົາ ຜູ້ເຊິ່ງຖືກກົດຂີ່...

ມີຫຼາຍຄົນທີ່ສາລະພາບກັບຕົນເອງວ່າ ສະພາບຂອງພວກເຮົາ ແມ່ນໜ້າເສົ້າສະຫຼົດ ແຕ່ບໍ່ມີໃຜທີ່ຊີ້ບອກເສັ້ນທາງໄປສູ່ການປົດປ່ອຍພວກເຮົາ ນອກຈາກ ບັນດານັກປະຕິວັດລັດເຊຍ. ແມ່ນ ເລນິນເອງ, ສະຫາຍ ເລນິນ ທີ່ຮັກແພງຂອງພວກເຮົາ ທີ່ເປັນຜູ້ບອກໃຫ້ພວກເຮົາເຊິ່ງເປັນນັກປະຕິວັດພາກຕາເວັນອອກຮູ້ວ່າຄວນຈະເລືອກເສັ້ນທາງໃດ, ເພິ່ນເປັນຜູ້ຊ່ວຍໃຫ້ພວກເຮົາກ້າວເດີນເປັນບາດທຳອິດ ເພື່ອວ່າ ໃຫ້ພວກເຮົາສາມາດຈັບມືກັບຊົນຊັ້ນກຳມາຊີບຂອງໂລກກ້າວເດີນໄປໜ້າ.

"ຫຼັງຈາກຮຽນຈົບແລ້ວ ເຈົ້າກະວ່າຈະເຮັດຫຍັງ ?" ແກ໊ກມາແນດໂຕ ຖາມຫງວຽນອາຍກວັກ.

"ແນ່ນອນວ່າຂ້ອຍຈະຕ້ອງກັບຄືນຫາປະເທດຊາດ ແລະ ຕໍ່ສູ້ເພື່ອພາລະກິດຂອງພວກເຮົາ. ຢູ່ປະເທດຫວຽດນາມພວກເຮົາຕ້ອງຕໍ່ສູ້ຢ່າງດຸເດືອດເຂັ້ມຂຽວຂາດ. ພວກເຮົາບໍ່ມີສິດຫຍັງໝົດ ຍົກເວັ້ນ "ສິດ" ເສຍພາສີໃຫ້ແກ່ "ເມືອງແມ່" ຝະລັ່ງ ແລະ ເສຍສ່ວຍໃຫ້ແກ່ພວກເຈົ້າຊີວິດ ອາດຍາຂຸນນາງເຈົ້າຖິ່ນ...ພວກເຮົາ ເປັນຜູ້ທີ່ຖືກດູໝິ່ນດູຖູກ, ພວກເຮົາເປັນຊົນຊາດ "ຊັ້ນຕ່ຳ" ແລະ ຍ້ອນແນວນັ້ນພວກເຮົາຈຶ່ງບໍ່ມີສິດເລືອກຕັ້ງ ແລະ ສະໝັກເລືອກຕັ້ງ. ຢູ່ປະເທດລັດເຊຍ ເຊິ່ງເປັນປະເທດຂອງ "ຄົນປ່າເຖື່ອນ", ດັ່ງທີ່ບັນດານັກປະຊາທິປະໄຕນາຍທຶນຍັງມັກເອີ້ນປະເທດລັດເຊຍນັ້ນ ພວກ

ເຮົາມີສິດເທົ່າທຽມກັນກັບກຳມະກອນລັດເຊຍ.

ພວກເຮົາໄດ້ຮັບຄວາມທຸກທໍລະມານມາຫລາຍແລ້ວ ແລະ ພວກເຮົາຍັງຈະຕ້ອງໄດ້ຮັບຄວາມທຸກທໍລະມານອີກບໍ່ໜ້ອຍ. ຄົນຜູ້ທີ່ມາປະເທດຂອງພວກເຮົາ ພ້ອມດ້ວຍ "ໜ້າທີ່ແຜ່ຂະຫຍາຍຄວາມສີວິໄລ" ຢູ່ບັນດາປະເທດຂອງພວກເຮົາບໍ່ຍອມໃຫ້ພວກເຮົາມີອິດສະຫລະພາບໄດ້ຕາມໃຈ. ແຕ່ພວກເຮົາກໍຕັດສິນໃຈເດີນຕາມເສັ້ນທາງ ແຫ່ງການປະຕິວັດເດືອນຕຸລາ, ພວກເຮົາຈະໝູນໃຊ້ບັນດາບົດຮຽນຂອງການປະຕິວັດ ເຂົ້າໃນພາກປະຕິບັດ...

ວັນທີ ໒໑ ເດືອນເມສາ ຫວຽນອາຍກວັກ ຖືກເຊີນເຂົ້າຮ່ວມການປະຊຸມ ຄັ້ງຄຶກຄື້ນເນື່ອງໃນໂອກາດລະລຶກວັນຄົບຮອບສາມປີແຫ່ງການສ້າງຕັ້ງ ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານຂອງຕາເວັນອອກທີ່ຈັດຂຶ້ນຢູ່ຫ້ອງປະຊຸມໃຫຍ່ ຂອງໂຮງຮຽນ. ຜູ້ກ່າວຄຳປາໄສຕໍ່ທີ່ປະຊຸມແມ່ນ ນັກເຄື່ອນໄຫວສາກົນກອມມູນິດ, ບັນດາຜູ້ນຳອົງຄະນະພັກເມືອງ ມົດສະກູ ແລະຄະນະອຳນວຍການໂຮງຮຽນ ລ້ວນແຕ່ໄດ້ ເນັ້ນໜັກເຖິງຄວາມໝາຍອັນສຳຄັນລະດັບສາກົນຂອງມະຫາວິທະຍາໄລ. ພວກເຂົາເຈົ້າລ້ວນແຕ່ຍົກເອົາໜຶ່ງໃນບັນດາບົດນິພົນສຸດທ້າຍຂອງ ວ.ອີ.ເລນິນ ທີ່ມີຊື່ວ່າ "ຮັດໜ້ອຍ ແຕ່ຮັດດີ" ຂຶ້ນມາເວົ້າ ເຊິ່ງໃນນັ້ນ ເລນິນ ເວົ້າວ່າ ອິດທິພົນທາງດ້ານແນວຄິດຂອງການປະຕິວັດເດືອນຕຸລາເຮັດໃຫ້ຂະບວນການປະຕິວັດຢູ່ພາກຕາເວັນອອກກຳລັງສຸກງອມ, ຢູ່ທີ່ນັ້ນເປັນເຂດທີ່ "ປະຊາຊົນສ່ວນໃຫຍ່ຖືກດູດດຶງເຂົ້າໃນການຕໍ່ສູ້ ປົດປ່ອຍຕົນເອງຢ່າງວ່ອງໄວ ໂດຍທີ່ບໍ່ຄາດຄິດມາກ່ອນໃນຊຸມປີຫລັງໆນີ້" * . ບັນດາ ຜູ້ກ່າວຄຳປາໄສຕ່າງກໍເວົ້າວ່າ ບົດບາດຂອງປັດໄຈອັດຕະວິໄສ ນັບວັນຍິ່ງເພີ່ມຂຶ້ນ, ຄວາມຕ້ອງການໃຫ້ມີຄົນທີ່ສາມາດແຜ່ຂະຫຍາຍສະຕິປະຕິວັດອັນກ້າວໜ້າຢູ່ໃນໝູ່ມະຫາຊົນຈຳນວນຫລວງຫລາຍນັບມື້ນັບເພີ່ມຂຶ້ນຈັກໄຊ. ແມ່ນຄົນປະເພດນີ້ຫລະທີ່ທາງໂຮງຮຽນມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານຂອງພາກຕາເວັນອອກກຳລັງກໍ່ສ້າງຢູ່, ໂດຍອີງໃສ່ບົດຮຽນການເມືອງ-ແນວຄິດຂອງຊົນຊັ້ນກຳມາຊີບຢູ່ບັນດາປະເທດທີ່ຂະຫຍາຍຕົວກວ່າ, ກ່ອນອື່ນໝົດແມ່ນຂອງປະເທດລັດເຊຍໂຊວຽດ.

---

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໔໕, ໜ້າ ໔໐໔. (ເປັນພາສາລັດເຊຍ)

ຫວຽນອາຍກວັກ ຟັງບັນດາຜູ້ປາໄສ ທັງແນມເບິ່ງປ່ອຍພົມຄຳ ຂອງບັນດານັກຮຽນໜຸ່ມນ້ອຍທີ່ນັ່ງອ້ອມໂຕເພິ່ນ ແລະ ຄິດວ່າ: "ຢູ່ນີ້ ຍັງຂາດນັກປະຕິວັດ ຂອງພວກເຮົາ ຂາດບັນດານັກຮັກຊາດຂອງພວກເຮົາ. ໃນປະເທດຂອງພວກເຮົາມີຜູ້ຄົນຈຳນວນຫລວງຫລາຍທີ່ຕຽມພ້ອມເສັຍສະຫລະຊີວິດຢ່າງສຸດໃຈໃຫ້ແກ່ການປົດປ່ອຍ ປະເທດຊາດອອກຈາກແອກຂ້າທາດໃນທັນໃດໂລດ ແຕ່ຊ້ຳພັດບໍ່ຮູ້ຈັກວ່າຈະເດີນຕາມເສັ້ນທາງໃດ , ຈະເຮັດແນວໃດເພື່ອປຸກລະດົມເພື່ອນຮ່ວມຊາດຕົນ, ຈັດຕັ້ງເຂົາເຈົ້າ ຍູ້ເຂົາເຈົ້າ ໃຫ້ລຸກຂຶ້ນຢ່າງເດັດດ່ຽວ. ຕ້ອງເຮັດທຸກສິ່ງທຸກຢ່າງເທົ່າທີ່ສາມາດຈະເຮັດໄດ້ ເພື່ອໃຫ້ມີເພື່ອນຮ່ວມຊາດຂອງເຮົາມາຮຽນຢູ່ໃນເວລາມໍ່ງນີ້".

ໃນວັນທີ ໒໐ ເດືອນພຶດສະພາ ຫວຽນອາຍກວັກ ຂຽນຈົດໝາຍໄປຫາ ພະແນກຕາເວັນອອກ ທີ່ຂຶ້ນກັບຄະນະບໍລິຫານງານ ສາກົນກອມມູນິດ, ໃນນັ້ນເພິ່ນສະເໜີໃຫ້ສ້າງຕັ້ງໜ່ວຍນັກຮຽນອາຊີສະເພາະຂຶ້ນຢູ່ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້-ອອກແຮງງານຂອງຕາເວັນອອກ.ເພິ່ນໄດ້ຂຽນຢູ່ໃນຈົດໝາຍວ່າ: "ໃນປະຈຸບັນຢູ່ທີ່ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານຂອງຕາເວັນອອກ ມີຕົວແທນໃຫ້ແກ່ປະຊາຊົນຕາເວັນອອກ ໖໒ ຊາດຮຽນຢູ່ທີ່ນັ້ນ.ຈຳນວນນັກສຶກສານັບມື້ນັບເພີ່ມຂຶ້ນໄປພ້ອມກັບການເປີດກວ້າງ ວຽກງານປຸກລະດົມຂອງສາກົນກອມມູນິດ.ມະຫາວິທະຍາໄລແຫ່ງນີ້ແມ່ນບ່ອນຊຸບຫລໍ່ສ້າງບັນດາພະນັກງານໂຄສະນາທຳອິດໃຫ້ແກ່ບັນດາປະເທດ ພາກຕາເວັນອອກ;ພ້ອມດຽວກັນມັນຍັງຕ້ອງເປັນພື້ນຖານທີ່ຈະນຳໄປສູ່ການສ້າງຕັ້ງເປັນ ສະຫະພັນກອມມູນິດພາກຕາເວັນອອກ".

ມໍ່ຈະຮອດວັນສາມັກຄີສາກົນຂອງຊາວຜູ້ອອກແຮງງານ, ເປັນເທື່ອທຳອິດໃນຊີ-ວິດຂອງເພິ່ນ ທີ່ຫວຽນອາຍກວັກ ໄດ້ສະເຫລີມສະຫລອງບຸນວັນທີໜຶ່ງເດືອນພຶດສະພາຢູ່ເທິງດິນແດນອິດສະຫລະ. ວັນທີ ໓໐ ເດືອນເມສາ, ໜັງສືພິມ "ປຣາວະດາ" ໄດ້ລົງພິມຄຳຮຽກຮ້ອງຂອງສະຫະພັນຊາວນາສາກົນ ທີ່ຮຽກຮ້ອງເຖິງຊາວນາທົ່ວໂລກ ໃຫ້ເຮັດແໜ້ນຄວາມສາມັກຄີສູ້ຮົບກັບຊົນຊັ້ນກຳມະກອນ. ໃນຈຳນວນລາຍເຊັນ ຂອງບັນດາສະມາຊິກຄະນະປະທານສະຫະພັນຊາວນາສາກົນ ກໍມີລາຍເຊັນຂອງ ຫວຽນອາຍກວັກຮ່ວມຢູ່ດ້ວຍ. ໃນມື້ດຽວກັນ ຫວຽນອາຍກວັກ ໄດ້ຮັບຈົດໝາຍຂອງ ວາດຊິນ ໂກລາຣົບ, ເລຂາທິການໃຫຍ່ຄະນະບໍລິຫານງານສາກົນກອມມູນິດ, ໃນຈົດໝາຍໄດ້ສະເໜີໃຫ້ເພິ່ນກ່າວປາໄສຢູ່ໃນການໂຮມຊຸມນຸມມິດຕິງລະລຶກວັນທີ ໑ ເດືອນພຶດສະພາຂອງປະ

ຊາວຈີນຜູ້ອອກແຮງງານ.

ຕອນເຊົ້າວັນທີ ໑ ເດືອນພຶດສະພາ ທ້ອງຟ້າປົກຄຸມໄປດ້ວຍເມກໝອກ, ຝົນຝອຍ ກໍຕົກລົງບໍ່ເຊົາຈັກເທື່ອ. ເຖິງວ່າຝົນຕົກກໍຕາມ ແຕ່ສະໜາມແດງກໍຖືກປະດັບປະດາດ້ວຍແຜ່ນປ້າຍ ແລະ ທຸງສີແດງ. ມີແຜ່ນປ້າຍຄຳຂວັນໃຫຍ່ແຜ່ນໜຶ່ງເນັ່ງຍາວ ໄປຮອດກຳແພງຫໍພິພິທະພັນປະຫວັດສາດ ຊຶ່ງມີໃຈຄວາມຮຽກຮ້ອງ ເຖິງບັນດາຜູ້ເຂົ້າຮ່ວມຊຸມນຸມມິດຕິງວ່າ: "ຈົ່ງສະຫລະເລືອດເນື້ອ ແລະຊີວິດໃຫ້ແກ່ການປະຕິວັດຄືດັ່ງທີ່ເລນິນໄດ້ເຮັດ".

ໃນວັນນັ້ນ ຫງວຽນອາຍກວັກ ພ້ອມດ້ວຍພວກສະຫາຍກອມມູນິດ ຕ່າງປະເທດອື່ນໆຢືນຢູ່ເທິງເວທີ ໃກ້ກັບກຳແພງວັງກະແລັມແລັງ. ດ້ວຍຄວາມຕື້ນຕັນໃຈ ຫງວຽນອາຍກວັກ ແນມເບິ່ງຝູງຊົນອັນໜາແໜ້ນທີ່ຍ່າງຜ່ານສຸສານ ວ.ອີ.ເລນິນ. ຄົນຄົນແຫ່ຂະບວນຖືປ້າຍເປັນພັນເປັນໝື່ນແຜ່ນ ໂດຍມີຄຳຂວັນທີ່ປຸກລະດົມຈິດໃຈ. ບາງຄັ້ງຄາວກໍແນມເຫັນບັນດາຮູບແຕ້ມສຽດສີນາຍົກລັດຖະມົນຕີຝະລັ່ງ ປວງກາເຣ, ຊຶ່ງເປັນຜູ້ຍຸຍົງຊົນຊັ້ນນາຍທຶນໂລກໃຫ້ຕ້ານປະເທດລັດເຊຍໂຊວຽດ. ສະມາຊິກພັກກອມມູນິດຝະລັ່ງຄົນໜຶ່ງ ຊຶ່ງຫງວຽນອາຍກວັກ ກໍສັງເກດເຫັນບໍ່ລືກວ່າແມ່ນໃຜ, ອາດຈະແມ່ນມົງມູດໂຊ, ຫົວໜ້າຄະນະຜູ້ແທນບັນດາອົງການກຳມະບານຝະລັ່ງ ຮ້ອງຂຶ້ນດ້ວຍສຽງດັງເປັນພາສາຝະລັ່ງຢ່າງບໍ່ຄິດບໍ່ຝັນວ່າ: "ໂຄ່ນລົ້ມປວງກາເຣ"* ທົ່ວສະໜາມຫລວງມີສຽງກ້ອງກັງວານປານຟ້າຜ່າຕອບຄືນ: "ໄຊໂຍ!"

໔

ຫລາຍປີຕໍ່ມາ, ໂຮ່ຈີມິນ ທວນຄືນວ່າ "ເມື່ອຄາວຍັງເປັນເດັກນ້ອຍ ທັງເມື່ອຄາວເປັນຜູ້ໃຫຍ່ແລ້ວ ຂ້າພະເຈົ້າບໍ່ເຄີຍມີຄວາມຮູ້ສຶກຈັກເທື່ອວ່າຕົນເອງມີອິດສະຫລະ-ພາບ, ປີຕິຍິນດີ ແລະ ຄວາມສຸກຢ່າງບໍ່ມີຂອບເຂດ ຄືໃນມົດສະກູເວລານັ້ນ. ເຖິງຢ່າງ

---

* ປວງກາເຣ ແມ່ນຫົວໜ້າລັດຖະບານຝະລັ່ງ ໃນຊຸມປີ ໑໙໒໒–໑໙໒໔ ເປັນຕົວແທນໃຫ້ແກ່ວົງການນາຍທຶນຂວາຈັດຜູ້ຮຸກຮານ ແລະ ຕ້ານລັດໂຊວຽດ.

ໃດກໍຕາມ, ແຕ່ຂ້າພະເຈົ້າກໍ່ນັບມື້ນັບວັນລໍຖ້າເວລາໄຂກອງປະຊຸມໃຫຍ່ຂອງສາກົນກອມມູນິດທົ່ວໂລກເພື່ອວ່າຫລັງຈາກກອງປະຊຸມໃຫຍ່ແລ້ວງກໍຈະໄດ້ອອກໄປເດີນທາງ ແລະ ລົງມືເຄື່ອນໄຫວປະຕິວັດໃນທັນທີທັນໃດໂລດ".

ກອງປະຊຸມໃຫຍ່ຄັ້ງທີ 5 ຂອງສາກົນກອມມູນິດທົ່ວໂລກໄດ້ເປີດຂຶ້ນໃນວັນທີ ໑໗ ເດືອນມິຖຸນາ ປີ ໑໙໘໔ ທີ່ໂຮງລະຄອນ ໂບນຊອຍ ຂອງມົດສະກູ. ນີ້ແມ່ນກອງປະຊຸມໃຫຍ່ຄັ້ງທໍາອິດຂອງຊາວກອມມູນິດໂລກ ທີ່ຮຽກໂຮມປະຊຸມກັນໂດຍບໍ່ມີ ເລນິນ ຊຶ່ງເປັນຜູ້ກໍ່ຕັ້ງ ແລະ ເປັນຜູ້ນໍາດ້ານແນວຄິດຂອງສາກົນກອມມູນິດ. ເຖິງແມ່ນວ່າ ບັນດານັກກອມມູນິດດໍາເນີນວຽກງານປະຕິວັດອັນຫຍຸ້ງຍາກ ແລະ ເຕັມໄປດ້ວຍການເສຍສະຫລະຢູ່ປະເທດໃດໜຶ່ງປານໃດກໍຕາມ, ແຕ່ພວກເຂົາເຈົ້າຍັງຄົງຈົງຮັກພັກດີຕໍ່ລັດທິ ເລນິນ. ຂໍ້ວິນິດໄສດັ່ງກ່າວແມ່ນເນື້ອໃນອັນຕົ້ນຕໍທີ່ບັນຈຸຢູ່ໃນບັນດາບົດປາໄສຂອງບັນດາຜູ້ແທນຈໍານວນໃຫຍ່. ບໍ່ແມ່ນເລື່ອງບັງເອີນເລີຍ ທີ່ກອງປະຊຸມໃຫຍ່ເລີ່ມປະຕິບັດວຽກງານ ດ້ວຍການຈັດຕັ້ງການໂຮມຊຸມນຸມມິດຕິງຂຶ້ນທີ່ສະໜາມແດງ. ໃນງານໂຮມຊຸມນຸມມິດຕິງ ດັ່ງກ່າວ, ມ.ອີ.ກາລີນິນ ໄດ້ອ່ານບົດປາໄສອັນຟົດຟື້ນ ແລະ ໜ້າດູດດື່ມໜື່ນເນື້ອໃນດັ່ງຕໍ່ໄປນີ້:

"ບັນດາສະຫາຍ! ຂ້າພະເຈົ້າຄິດວ່າຍັງອີກດົນ ກ່ອນຈະຮອດກອງປະຊຸມ ໃຫຍ່ນັ້ນ, ແຕ່ລະຄົນໃນໝູ່ພວກເຮົາລ້ວນແຕ່ສໍານຶກຢ່າງຈະແຈ້ງວ່າ ຄວາມເວົ້າທໍາອິດ ຈະກ່າວຕໍ່ກອງປະຊຸມໃຫຍ່ ແນ່ນອນວ່າຈະເວົ້າກ່ຽວກັບສະຫາຍ ເລນິນ. ອັນນັ້ນ ແມ່ນເລື່ອງທີ່ແນ່ນອນແລ້ວ. ຜູ້ນໍາຂອງການປະຕິວັດລັດເຊຍ, ຜູ້ນໍາຂອງລັດທິ ໂບນເຊວິກຊຶ່ງພ້ອມດຽວກັນຍັງເປັນຜູ້ນໍາສາກົນກອມມູນິດອີກດ້ວຍ. ເລື່ອງນີ້ບໍ່ແມ່ນເລື່ອງ ບັງເອີນທາງປະຫວັດສາດຈັກດີ້. ອັນທີ່ພວກເຮົາເອີ້ນວ່າ "ລັດທິເລນິນ" ນັ້ນລວມເອົາລັດທິສາກົນນິຍົມທີ່ສູດກົກສູດປາຍ ຄົບຖ້ວນ ແລະ ມີຜົນສັກສິດທີ່ສູດໄວ້ຢູ່ໃນຕົວມັນເອງ".

ຢູ່ກອງປະຊຸມໃຫຍ່ດັ່ງກ່າວ, ຫວູງວຽນອາຍກວັກ ໄດ້ກ່າວປາໄສຕັ້ງສາມເທື່ອ ຄືບົດປະກອບຄວາມເຫັນກ່ຽວກັບການເຄື່ອນໄຫວຂອງຄະນະບໍລິຫານງານສາກົນກອມມູນິດ. ບົດປາໄສກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນ ແລະ ບົດປະກອບຄວາມເຫັນ ກ່ຽວກັບບັນຫາທີ່ດິນ. ເພິ່ນກ່າວປາໄສຢ່າງຟົດຟື້ນ ແລະ ໜ້າປະທັບໃຈ. ເພິ່ນກ່າວຕໍານິຕິຈານບັນດາຂໍ້ບົກພ່ອງຂອງພັກກອມມູນິດຝະລັ່ງ ຊຶ່ງເປັນພັກຂອງເພິ່ນເອງ. ບົດປາໄສຂອງຫວູງວຽນອາຍກວັກ ທີ່ກ່າວຢູ່ທີ່ຄະນະກໍາມະການເພື່ອວຽກງານຊົນຊາດ ແລະເມືອງ

ຂຶ້ນ ຖືກລົງພິມໃນໜັງສືພິມ "ປຣາວະດາ" ພາຍໃຕ້ຫົວຂໍ້ວ່າ: "ຈາກຄວາມເວົ້າໄປສູ່ການກະທຳ, ບັນດາຕົວເລກທີ່ຢັ້ງຢືນ, ບົດປາໄສຂອງຫວງຽນອາຍກວັກ ຜູ້ແທນ ອິນດູຈີນ".

ລາຍງານຂຽນເປັນຊະວະເລກ ຂອງກອງປະຊຸມໃຫຍ່ຄັ້ງທີຫ້າຂອງສາກົນກອມມູນິດໄດ້ບັນທຶກການສົນທະນາທີ່ໜ້າສົນໃຈລະຫວ່າງ ວາດຊິນ ໂກລາຣົບ ກັບຜູ້ແທນຈາກອິນດູຈີນໃນພິທີໄຂກອງປະຊຸມໃຫຍ່ຢ່າງສະຫງ່າງາມຜ່າເຜີຍ.

"ສະຫາຍໂກລາຣົບ: ຄະນະປະທານໄດ້ສະເໜີມະຕິສະໜັບສະໜູນ ປະຊາຊົນບັນດາປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ.

ສະຫາຍຫວງຽນ: ຂ້າພະເຈົ້າຢາກຮູ້ວ່າ ກອງປະຊຸມໃຫຍ່ໄດ້ສົ່ງຄຳຮຽກຮ້ອງພິເສດໄປຍັງບັນດາປະເທດເມືອງຂຶ້ນຫລືບໍ່ .

ສະຫາຍ ໂກລາຣົບ: ໃນວາລະປະຊຸມ ຂອງກອງປະຊຸມໃຫຍ່ນັ້ນມີບັນຫາ ກ່ຽວກັບເມືອງຂຶ້ນ, ມີບັນຫາກ່ຽວກັບປະເທດພາກຕາເວັນອອກ, ກ່ຽວກັບບັນຫາປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ, ສະນັ້ນພວກສະຫາຍທັງໝົດທີ່ມີຄວາມມຸ່ງມາດປາດຖະໜາຢາກຊີ້ແຈງກ່ຽວກັບບັນຫາເຫລົ່ານີ້ ລ້ວນແຕ່ຈະມີໂອກາດປະກອບ ຄວາມຄິດຄວາມເຫັນ.

ສະຫາຍຫວງຽນ: ກ່ອນລົງມະຕິຮັບຮອງເອົາຄຳຮຽກຮ້ອງນີ້ ຂ້າພະເຈົ້າ ສະເໜີເພີ່ມເຕີມບາງຄວາມວ່າ: "ເຖິງປະຊາຊາດເມືອງຂຶ້ນ".

ຂໍ້ສະເໜີຂອງສະຫາຍຫວງຽນອາຍກວັກ ຮັບເອົາໄດ້".

ແມ່ນຫຍັງທີ່ເຮັດໃຫ້ສະຫາຍຫວງຽນອາຍກວັກ ລຸກຢືນຂຶ້ນກັບທີ່ຢູ່ຫ້ອງກວ້າງໃຫຍ່ຂອງໂຮງລະຄອນໂບນໂຊຍ ເພື່ອປະກອບຄວາມເຫັນກ່ຽວກັບວາລະປະຊຸມຂອງກອງປະຊຸມໃຫຍ່. ແມ່ນຫຍັງທີ່ເຮັດໃຫ້ສະຫາຍຫວງຽນມີຄວາມເດັດດ່ຽວໜຽວແໜ້ນຄືແນວນັ້ນ ສິ່ງດັ່ງກ່າວເປັນທີ່ແຈ່ມແຈ້ງວ່າ ເນື່ອງຈາກວ່າພາຍຫລັງທີ່ ມານູອິນສະກີ ກ່າວລາຍງານກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນຕໍ່ໜ້າຜູ້ແທນທີ່ກອງປະຊຸມໃຫຍ່, ເວລາຕຳໜິພັກກອມມູນິດຝະລັ່ງວ່າ ພັກດັ່ງກ່າວບໍ່ຫ້າວຫັນໃນການໂຄສະນາຕ້ານລັດທິ ເມືອງຂຶ້ນ ສະຫາຍ ມານູອິນສະກີ ໄດ້ຍົກບາງເຫດການ ອັນສຳຄັນຂຶ້ນມາ. ເດືອນມັງກອນ ປີ ໑໙໒໔, ເວລາທີ່ພັກກອມມູນິດຝະລັ່ງເປີດກອງປະຊຸມໃຫຍ່ຢູ່ທີ່ ເລອົງ, ສາກົນກອມມູນິດໄດ້ສົ່ງຄຳຮຽກຮ້ອງໄປຍັງຊົນຊັ້ນກຳມະກອນຝະລັ່ງ ແລະ ປະຊາຊົນບັນດາປະເທດ

ເມືອງຂຶ້ນຝະລັ່ງ. ເມື່ອເອົາຄຳຮຽກຮ້ອງນີ້ລົງພິມຢູ່ໃນໜ້າໜັງສືພິມ, ທາງກອງບັນນາທິການໜັງສືພິມ "ຊຸຍມານິເຕ" ໄດ້ຕັດຂໍ້ຄວາມທີ່ວ່າ "ເຖິງປະຊາຊາດ ເມືອງຂຶ້ນ" ອອກ. ເກືອບໜຶ່ງປີກ່ອນໜ້ານີ້, ສາກົນກອມມູນິດໄດ້ສົ່ງຄຳຮຽກຮ້ອງ ເຖິງປະຊາຊາດເມືອງຂຶ້ນໃຫ້ລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ. ຢູ່ອານເຊຣີ ພະແນກໜຶ່ງຂອງພັກກອມມູນິດຝະລັ່ງ ເມື່ອໄດ້ຮູ້ກ່ຽວກັບຄຳຮຽກຮ້ອງ ຈຶ່ງໄດ້ລົງມະຕິຄັດຄ້ານ ການກະທຳນີ້ຂອງ ສາກົນກອມມູນິດ. ມານູອິນສະກີ ຖາມຂຶ້ນວ່າ ອີງໃສ່ຈິດໃຈຄືແນວນີ້ຢູ່ໃນພັກຈະດຳເນີນວຽກງານໂຄສະນາອັນຫ້າວຫັນໃນໝູ່ປະຊາຊົນພື້ນເມືອງ ຢູ່ບັນດາປະເທດເມືອງຂຶ້ນໄດ້ຫລືບໍ ? ມານູອິນສະກີ ຍັງຊີ້ໃຫ້ຜູ້ແທນກອງປະຊຸມໃຫ້ເຫັນວ່າມາຮອດປະຈຸບັນ, ພັກກອມມູນິດຝະລັ່ງກໍຍັງບໍ່ທັນໄດ້ຜ່ານເອກະສານອັນໃດອັນໜຶ່ງ ເຊິ່ງໃນນັ້ນໄດ້ປະກາດຄຳຂວັນກ່ຽວກັບສິດຂອງປະເທດເມືອງຂຶ້ນໃນການແຍກຕົວອອກຈາກເມືອງແມ່. ພັກຂອງບໍ່ຫ້າວຫັນປານໃດໃນການດຳເນີນວຽກງານໂຄສະນາປະຕິວັດ ແລະ ວຽກງານຈັດຕັ້ງໃນໝູ່ກຳມະກອນປະເທດເມືອງຂຶ້ນ ໓ ແສນຄົນທີ່ດຳລົງຊີວິດຢູ່ປະເທດ ຝະລັ່ງ ແລະ ພົນທະຫານຜິວດຳ ໘໕໐.໐໐໐ ຄົນທີ່ກຳລັງຮັບໃຊ້ໃນກອງທັບຝະລັ່ງ.

ເຊັ່ນດຽວກັບມານູອິນສະກີ ໃນບົດປາໄສຂອງຕົນ ຜູ້ແທນຈາກອິນດູຈີນ ລ້ວນແຕ່ເອົາໃຈໃສ່ພິເສດເຖິງຄວາມຈຳເປັນຕ້ອງມີການກະທົບໄປມາຢ່າງແໜ້ນແຟ້ນລະຫວ່າງບັນດາພັກກອມມູນິດທະວີບເອີລົບ ກັບຊາວຜູ້ອອກແຮງງານຢູ່ບັນດາປະເທດເມືອງຂຶ້ນ . ຫວຽນອາຍກວັກ ເວົ້າວ່າ:

"ຕາບໃດທີ່ພັກກອມມູນິດຝະລັ່ງ ແລະ ພັກກອມມູນິດອັງກິດ ບໍ່ດຳເນີນ ນະໂຍບາຍຢ່າງຕັ້ງໜ້າກ່ຽວກັບບັນຫາເມືອງຂຶ້ນ, ຕາບໃດທີ່ຍັງບໍ່ມີການຕິດຕໍ່ພົວພັນກັບມະຫາຊົນບັນດາປະເທດເມືອງຂຶ້ນ ຕາບນັ້ນວຽກງານໂຄສະນາໃນໝູ່ມະຫາຊົນທັງໝົດ ຂອງເຂົາເຈົ້າຈະບໍ່ມີໝາກຜົນຫຍັງໝົດ. ວຽກງານດັ່ງກ່າວຈະບໍ່ມີໝາກຜົນກໍຍ້ອນວ່າ ມັນກົງກັນຂ້າມກັບລັດທິເລນິນ...ຕາມຄຳເຫັນຂອງ ເລນິນ, ຢາກໃຫ້ການປະຕິວັດຢູ່ພາກຕາເວັນຕົກໄດ້ຮັບໄຊຊະນະຕ້ອງຕິດຕໍ່ຢ່າງສະໜິດແໜ້ນກັບຂະບວນການປົດປ່ອຍ ຕ້ານຈັກກະພັດຢູ່ປະເທດເມືອງຂຶ້ນ ແລະ ບັນດາປະເທດຕົກເປັນຂ້າທາດ. ຄືດັ່ງ ເລນິນໄດ້ສອນພວກເຮົາໄວ້ວ່າ, ກະໂຕບັນຫາເມືອງຂຶ້ນ ແມ່ນພາກສ່ວນໜຶ່ງໃນບັນຫາລວມຂອງການປະຕິວັດກຳມາຊີບ ແລະ ພະເດັດການກຳມາຊີບ...ສ່ວນຂ້າພະເຈົ້າ ເຊິ່ງເປັນຊາວພື້ນເມືອງຂອງປະເທດເມືອງຂຶ້ນຂອງຝະລັ່ງໃນປະຈຸບັນ ແລະ ທັງເປັນ ສະມາຊິກ

ພັກກອມມູນິດຝະລັ່ງ, ຂ້າພະເຈົ້າຄວນຈະເວົ້າດ້ວຍຄວາມເສຍໃຈວ່າ ພັກກອມມູນິດຝະລັ່ງພວກຂ້າພະເຈົ້າໄດ້ເຄື່ອນໄຫວໜ້ອຍທີ່ສຸດກ່ຽວກັບບັນດາປະເທດເມືອງຂຶ້ນ".

ຫງວຽນອາຍກວັກ ໄດ້ຍົກຂໍ້ສະເໜີຕົວຈິງຕໍ່ກອງປະຊຸມໃຫຍ່, ຕາມຄຳເຫັນຂອງເພິ່ນ ການປະຕິບັດຂໍ້ສະເໜີດັ່ງກ່າວໃຫ້ປະກົດເປັນຈິງ ຈະຊ່ວຍຊຸກ ຍູ້ການເຄື່ອນໄຫວຂອງພັກກອມມູນິດຝະລັ່ງ ກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນ ແລະເພີ່ມທະວີວຽກງານໂຄສະນາປະຕິວັດຢູ່ບັນດາປະເທດເມືອງຂຶ້ນ.

ຫງວຽນອາຍກວັກ ເວົ້າຕໍ່ໄປວ່າ:

"ຕາມຄຳເຫັນຂອງຂ້າພະເຈົ້າ ບັນດາຂໍ້ສະເໜີເຫຼົ່ານີ້ແມ່ນ ສົມເຫດສົມຜົນ ແລະ ຖ້າວ່າສາກົນກອມມູນິດ ແລະ ບັນດາຜູ້ແທນໃນພັກຂອງພວກຂ້າພະເຈົ້າຫາກເຫັນດີນຳ, ຂ້າພະເຈົ້າເຊື່ອວ່າ ເມື່ອເຖິງສະໄໝເປີດກອງປະຊຸມໃຫຍ່ຄັ້ງທີຫົກຂອງສາກົນກອມມູນິດເມື່ອນັ້ນພັກກອມມູນິດຝະລັ່ງ ອາດເວົ້າໄດ້ວ່າ ການສ້າງແນວໂຮມເອກະພາບຂອງປະຊາຊົນເມືອງແມ່ ແລະ ເມືອງຂຶ້ນໄດ້ກາຍເປັນຄວາມຈິງ.

ຫງວຽນອາຍກວັກ ຮູ້ດີວ່າ ເປັນຫຍັງພັກກອມມູນິດຝະລັ່ງ ຈຶ່ງເຄື່ອນໄຫວຢ່າງບໍ່ເປັນຜົນ. ເວລານັ້ນ ຊາວກອມມູນິດຝະລັ່ງຫລາຍຄົນຫລັບຫູຫລັບຕາປະຕິບັດຕາມ ຫລັກການ ເຊິ່ງເບິ່ງຄືວ່າໜັກແໜ້ນຂອງ ໂຣຊາ ລຸກຊຳບູກ, ນາງຍົກໃຫ້ເຫັນວ່າ ຄວາມເປັນເອກະລາດທາງດ້ານການເມືອງຂອງບັນດາປະເທດເມືອງຂຶ້ນ ອາດຈະເປັນ ພຽງແຕ່ຜົນທີ່ໄດ້ມາຈາກການປະຕິວັດສັງຄົມຢູ່ເມືອງແມ່ເທົ່ານັ້ນ ສະນັ້ນຈຶ່ງບໍ່ຕ້ອງຊຸກຍູ້ ວຽກງານປະຕິວັດຢູ່ບັນດາປະເທດເມືອງຂຶ້ນ; ເມື່ອການປະຕິວັດຢູ່ເມືອງແມ່ໄດ້ຮັບໄຊຊະນະຫລັງຈາກທີ່ໄດ້ອຳນາດປົກຄອງມາຢູ່ໃນກຳມືຂອງຕົນ, ຊົນຊັ້ນກຳມາຊີບຈະມອບສິດ ອິດສະຫລະພາບ ແລະ ອະນາຄົດສັງຄົມນິຍົມໃຫ້ແກ່ປະຊາຊົນບັນດາເມືອງຂຶ້ນ. ຫງວຽນ-ອາຍກວັກ ຕໍ່ສູ້ຢ່າງລຽນຕິດກັບທັດສະນະຜິດພາດດັ່ງກ່າວຂອງບັນດາສະຫາຍຝະລັ່ງ . ອາດເວົ້າໄດ້ວ່າ, ສ່ວນໃຫຍ່ຍ້ອນວຽກງານໂຄສະນາອົນຂວາຍອັນເປັນປົກກະຕິຂອງສາກົນກອມມູນິດ ຍ້ອນຄວາມພະຍາຍາມຂອງບັນດາຜູ້ຕາງໜ້າປະເທດເມືອງຂຶ້ນ ຊຶ່ງກ່ອນອື່ນໝົດຍ້ອນຄົນປະເພດຄືຫງວຽນອາຍກວັກນັ້ນລະ, ພັກກອມມູນິດຝະລັ່ງຕໍ່ມາຈຶ່ງມີຫລັກໝັ້ນສາກົນຢ່າງແທ້ຈິງກ່ຽວກັບບັນຫາເມືອງຂຶ້ນ, ເວົ້າແນວນີ້ບໍ່ແມ່ນເວົ້າໂຍກ. ພັກກອມມູນິດຝະລັ່ງໄດ້ສະໜັບສະໜູນຢ່າງເຕັມປ່ຽມຕໍ່ການຕໍ່ສູ້ປົດປ່ອຍ ຂອງບັນດາປະຊາຊາດເມືອງຂຶ້ນ ໂດຍຄັດຄ້ານຢ່າງເດັດດ່ຽວຕໍ່ການກໍ່ສົງຄາມຂອງພວກລ່າເມືອງຂຶ້ນຝະລັ່ງ ຢູ່

ອິນດູຈີນ ແລະ ຢູ່ອານເຊຣີ ໃນຊຸມປີ ໔໐ ແລະ ໕໐.

ຜູ້ຕາງຫນ້າຄົນດຽວຂອງອິນດູຈີນທີ່ຕັ້ງຢູ່ແດນໄກໄດ້ຍາດແຍ່ງເອົາຄວາມເປັນຈິດເປັນໃຈໄດ້ຢ່າງກວ້າງຂວາງຢູ່ທີ່ກອງປະຊຸມໃຫຍ່. ບັນດາຜູ້ແທນຂອງພັກກອມມູນິດຈາກທະວີບຕ່າງໆ ທຳຄວາມຮູ້ຈັກ ແລະ ໂອ້ລົມກັບເພິ່ນດ້ວຍຄວາມເຕັມໃຈ,ພວກເຂົາເຈົ້າເຊີນ ຫງວຽນຖ່າຍຮູບນຳກັນ. ມີເທື່ອຫນຶ່ງ, ຈິດຕະກອນຂອງມົດສະກູຄົນຫນຶ່ງ ຍ່າງເຂົ້າມາໃກ້ແລ້ວກໍສະເຫນີໃຫ້ຫງວຽນ ຢືນໃຫ້ເຂົາຜູ້ນັ້ນແຕ້ມຮູບ. "ຫນັງສືພິມ ກຳມະກອນ" ສະບັບຫນຶ່ງຂອງມົດສະກູ ທີ່ອອກວັນທີ ໒໗ ເດືອນກໍລະກົດ ໄດ້ລົງຮູບແຕ້ມຂອງຫງວຽນອາຍກວັກ ສະມາຊິກຂອງສາກົນກອມມູນິດຄົນທ້ອງຖິ່ນອິນດູຈີນ.

ທັນທີທີ່ກອງປະຊຸມໃຫຍ່ຄັ້ງທີຫ້າຂອງສາກົນກອມມູນິດປິດລົງ ມີຫລາຍກອງປະຊຸມສາກົນອື່ນໆທີ່ສຳຄັນໄດ້ຖືກເປີດຂຶ້ນຢູ່ມົດສະກູ ຕິດໆຕໍ່ໆກັນ. ໃນບັນດາກອງປະຊຸມ ທັງຫມົດເຫລົ່ານັ້ນ ເປັນຄັ້ງທຳອິດທີ່ມີຜູ້ຕາງຫນ້າຂອງອິນດູຈີນເຂົ້າຮ່ວມ. ຢູ່ປາຣີ ຫງວຽນອາຍກວັກໄດ້ເຂົ້າເປັນສະມາຊິກຂອງອົງການກຳມະບານຂອງກຳມະກອນຊຶ່ງເປັນອົງປະກອບຫນຶ່ງຂອງສະຫະພັນແຮງງານເອກະພາບທົ່ວໂລກ, ສະຫະພັນນີ້ຖືກສ້າງຕັ້ງຂຶ້ນພາຍໃຕ້ການນຳພາຂອງບັນດານັກກອມມູນິດ. ສະນັ້ນ, ຫງວຽນອາຍກວັກ ຊຶ່ງມີຖານະເປັນຜູ້ແທນທີ່ມີອຳນາດເຕັມ ພ້ອມດ້ວຍຫມູ່ຄູ່ເກົ່າແກ່ຂອງເພິ່ນຄື ມົງມູດໂຊ ຈຶ່ງໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີສາມຂອງກຳມະບານສາກົນຢູ່ທີ່ມົດສະກູ. ຕໍ່ມາ ເພິ່ນໄດ້ເຂົ້າຮ່ວມກອງປະຊຸມຄັ້ງທີຫນຶ່ງຂອງອົງການຈັດຕັ້ງສາກົນ ເພື່ອໃຫ້ການຊ່ວຍເຫລືອ ບັນດານັກຮົບປະຕິວັດ. ຫລາຍປີຕໍ່ມາ ກະໂຕອົງການນີ້ເອງທີ່ມີບົດບາດອັນຕັດສິນຊີ້ຂາດໃນການຊ່ວຍຊີວິດ ຫງວຽນອາຍກວັກ ໃຫ້ພົ້ນຈາກການເປັນນັກໂທດຂອງພວກລ່າເມືອງຂຶ້ນ. ເພິ່ນຍັງຫນຸ່ມ ເບິ່ງຄືວ່າຍັງເປັນຊາວຫນຸ່ມ ສະນັ້ນບໍ່ແມ່ນເລື່ອງບັງເອີນເລີຍທີ່ເພິ່ນ ມີຫນ້າໃນຄະນະປະທານຂອງກອງປະຊຸມໃຫຍ່ຄັ້ງທີສີ່ຂອງຊາວຫນຸ່ມກອມມູນິດສາກົນ. ຍ້ອນວ່າໃນເວລານັ້ນຫງວຽນອາຍກວັກ ຍັງເປັນຜູ້ຕາງຫນ້າຜູ້ດຽວຂອງປະຊາຊົນ ທີ່ໄດ້ຮັບຄວາມທໍລະມານ ຊຶ່ງໄດ້ແກ່ກຳມະກອນ, ຊາວນາ, ຊາວຫນຸ່ມ,ແມ່ຍິງ, ຜູ້ເຖົ້າ, ເດັກນ້ອຍ, ດັ່ງນັ້ນຈຶ່ງບໍ່ມີຫຍັງທີ່ຫນ້າແປກປະຫລາດເລີຍວ່າ ຫລັງຈາກນັ້ນມາ ຫງວຽນ ກໍຖືກເຊີນເຂົ້າຮ່ວມກອງປະຊຸມໃຫຍ່ແມ່ຍິງສາກົນໃນນາມເປັນແຂກກິຕິມະສັກ.

ການພົບພໍ້ທີ່ບໍ່ອາດລືມໄດ້ ຢູ່ທີ່ກອງປະຊຸມໃຫຍ່ແມ່ຍິງສາກົນນັ້ນ ແມ່ນການພົບພໍ້ກັນລະຫວ່າງ ຫງວຽນອາຍກວັກ ກັບ ກະຣຸບສະກາຢາ. ຫລາຍສິບປີຕໍ່ມາ ຄືເມື່ອເພິ່ນ

ມີອາຍຸສູງແລ້ວ ເພິ່ນໄດ້ຫວນຄິດຄືນເຖິງການພົບພໍ້ດັ່ງກ່າວດ້ວຍຄວາມຮູ້ສຶກອົບອຸ່ນ. ຢູ່ເທິງເວທີຄະນະປະທານຂອງກອງປະຊຸມໃຫຍ່ ຫວງວຽນອາຍກວັກ ນັ່ງຫ່າງຈາກ ນ.ຊ. ກະຣຸບສະກາຢາ ບໍ່ໄກປານໃດ ແລະ ເວລາພັກຜ່ອນ ພວກສະຫາຍກໍໄດ້ແນະນຳ ເພິ່ນໃຫ້ຮູ້ຈັກກັບ ກະຣຸບສະກາຢາ ຜູ້ເຊິ່ງ ໂຮ່ຈີມິນ ໄດ້ເວົ້າໃນເວລາຕໍ່ມາວ່າ "ເປັນແມ່-ຍິງ ທີ່ໃຈດີ ແລະ ງ່າຍດາຍ". ກະຣຸບສະກາຢາ ໄດ້ສົນໃຈຫລາຍນຳການເລົ່າ ຂອງຫວງວຽນອາຍກວັກ ກ່ຽວກັບບັນດາເຫດການທີ່ກຳລັງເກີດຂຶ້ນຢູ່ອິນດູຈີນຫ່າງໄກ. ນາງຖາມເຖິງຂະບວນການປະຕິວັດຢູ່ອິນດູຈີນວ່າໄດ້ຂະຫຍາຍຕົວຄືແນວໃດ, ແມ່ນກຳລັງອັນໃດທີ່ເປັນກອງລະວັງໜ້າຂອງການຕໍ່ສູ້ ແລະ ແມ່ຍິງກໍເຂົ້າຮ່ວມໃນຂະບວນການ ດັ່ງກ່າວຫລືບໍ່ .

ເມື່ອຟັງຫວງວຽນອາຍກວັກ ເລົ່າຈົບລົງ, ນາງເວົ້າຂຶ້ນວ່າ:

"ຢູ່ຕໍ່ໜ້າບັນດານັກປະຕິວັດປະເທດສະຫາຍມີໜ້າທີ່ສັບສົນທີ່ສຸດ, ຄວາມຂັດແຍ່ງກ້ຽວພັນກັນຫຍຸ້ງ ຈົນບໍ່ສາມາດແກ້ໄຂໄດ້ ຂ້າພະເຈົ້າຄິດວ່າ ຖ້າບໍ່ກຳແໜ້ນທິດສະດີກອມມູນິດ ແລະ ບໍ່ຮູ້ໝູນໃຊ້ທິດສະດີດັ່ງກ່າວໃຫ້ຖືກຕ້ອງໃນຕົວຈິງກໍ່ຈະແກ້ຄວາມຂັດແຍ່ງດັ່ງກ່າວບໍ່ໄດ້."

ຫວງວຽນ ເວົ້າຕໍ່ໄປວ່າ:

"ພວກຂ້າພະເຈົ້າກໍໄດ້ສະຫລຸບຄືແນວນັ້ນເໝືອນກັນ. ຢູ່ໃນບັນດາບົດນິພົນຂອງເລນິນ ແມ່ນກະໂຕແນວຄິດນີ້ເອງ ທີ່ຈັບໃຈຂ້າພະເຈົ້າຫລາຍກວ່າໝູ່. ສະຫາຍຈຳໄດ້ບໍ່ນັ້ນຄືບົດລາຍງານຂອງ ເລນິນ ທີ່ອ່ານຕໍ່ກອງປະຊຸມໃຫຍ່ຄັ້ງທີສອງຂອງບັນດາອົງການຈັດຕັ້ງກອມມູນິດແຫ່ງປະຊາຊາດພາກຕາເວັນອອກຊຶ່ງມີຕອນໜຶ່ງວ່າ: "... ໂດຍຄຳນຶງເຖິງເງື່ອນໄຂທີ່ເປັນຈຸດພິເສດຂອງຕົນ ເຊິ່ງບໍ່ມີຢູ່ໃນປະເທດເອີລົບນັ້ນພວກສະຫາຍຕ້ອງຮູ້ຈັກໝູນໃຊ້ທິດສະດີ ແລະ ພາກປະຕິບັດໃຫ້ແທດເໝາະກັບບັນດາເງື່ອນໄຂ ໃນເວລາທີ່ມະຫາຊົນສ່ວນໃຫຍ່ແມ່ນຊາວນາ, ໃນເວລາທີ່ຈະຕ້ອງປະຕິບັດໜ້າທີ່ຕໍ່ສູ້ບໍ່ແມ່ນຕ້ານທຶນ, ແຕ່ຫາກແມ່ນຕ້ານເສດເຫລືອຂອງສະໄໝກາງ" * . ແຕ່ຢູ່ດິນແດນ ພວກຂ້າພະເຈົ້າ, ນອກຈາກບັນດາສິ່ງເຫລົ່ານັ້ນ, ຍັງມີແອກຄອບຄອງອັນໂຫດຮ້າຍສາມານຂອງພວກລ່າເມືອງຂຶ້ນອີກດ້ວຍ.

---

* ວ.ອີ. ເລນິນ. ນິພົນຄົບຊຸດ, ເຫລັ້ມ ໓໖, ໜ້າ ໓໔໖. (ເປັນພາສາລັດເຊຍ)

"ສະຫາຍ ກະຣຸບສະກາຍາ!" ຫງວຽນອາຍກວັກ ເວົ້າຕໍ່. "ຖ້າສະຫາຍຫາກຮູ້ວ່າ ຢູ່ພາກຕາເວັນອອກແລະ ຢູ່ອິນດູຈີນ, ບ້ານເກີດເມືອງນອນຂ້າພະເຈົ້າພຸ້ນ, ຄົນທັງຫລາຍເຄົາລົບນັບຖື ເລນິນ ເຖິງຂັ້ນໃດ ! ສຳລັບຊົນຊັ້ນກຳມະກອນ ທະວີບເອີລົບເພິ່ນຄືຜູ້ນຳ, ຜູ້ນຳພາ, ຄູອາຈານ, ສ່ວນສຳລັບບັນດາປະຊາຊາດ ພາກຕາເວັນອອກເພິ່ນແຮ່ງສູງສົ່ງກວ່ານັ້ນອີກ. ສຳລັບເຂົາເຈົ້າ ເພິ່ນຄືພະຜູ້ເປັນເຈົ້າ ຖ້າສາມາດເວົ້າໄດ້ຄືຈັ່ງຊັ້ນ. ຂ້າພະເຈົ້າມາປະເທດລັດເຊຍໂຊວຽດດ້ວຍຄວາມໄຝ່ຝັນຢາກພົບເລນິນ, ຢາກໂອ້ລົມກັບເພິ່ນ, ແຕ່ວ່າຫນ້າເສຍດາຍທີ່ຂ້າພະເຈົ້າບໍ່ທັນໄດ້ພົບພໍ້ກັບ ເລນິນ. ປະຈຸບັນ ສິ່ງທີ່ເຫລືອໄວ້ແກ່ພວກຂ້າພະເຈົ້າແມ່ນ ທິດສະດີອັນຍິ່ງໃຫຍ່ຂອງເພິ່ນ. ພວກຂ້າພະເຈົ້າຜູ້ເປັນນັກຮັກຊາດຫວຽດນາມ ງົມທາງໃນເງົາມືດມາດົນແສນດົນ ແຕ່ກໍ່ຍັງຊອກບໍ່ເຫັນເສັ້ນທາງປົດປ່ອຍປະເທດຊາດຕົນ. ເລນິນ ໄດ້ຊີ້ເສັ້ນທາງດັ່ງກ່າວແກ່ພວກຂ້າ-ພະເຈົ້າ ແລະ ພວກຂ້າພະເຈົ້າກໍ່ຈະເດີນຕາມເສັ້ນທາງດັ່ງກ່າວຕະຫລອດໄປ.

໕

ຫນຶ່ງປີໄດ້ຜ່ານພົ້ນໄປ ນັບຕັ້ງແຕ່ເວລາທີ່ຫງວຽນອາຍກວັກ ຢືນຢູ່ເທິງ ກຳປັ່ນ ແລະ ແນມເຫັນທັດສະນີຍະພາບ ອັນປະທັບໃຈຂອງເມືອງ ເປໂຕຣກຣາດ ອູ່ ແຫ່ງມະຫາປະຕິວັດ ເດືອນຕຸລາ. ແຕ່ວ່າຫນຶ່ງປີດັ່ງກ່າວນັ້ນບັນຈຸເຫດການຫລາຍຢ່າງທັງເປັນປີແຫ່ງຫົວລ້ຽວຫົວຕໍ່ສຳລັບຊີວິດປະຕິວັດອາຊີບຂອງເພິ່ນ. ການຄົ້ນຄວ້າບັນດາບົດນິພົນຂອງ ເລນິນ ຢ່າງເລິກເຊິ່ງ, ການເຄື່ອນໄຫວຢ່າງຕັ້ງຫນ້າໃນສາກົນກອມມູນິດ , ການສຶກສາຢູ່ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານ ຂອງພາກຕາເວັນອອກ, ການທຳຄວາມຮູ້ຈັກກັບຊີວິດຂອງປະຊາຊົນໂຊວຽດ, ກັບບົດຮຽນທີ່ມີຫົວຄິດ ປະດິດສ້າງອັນອຸດົມຮັ່ງມີ ແລະ ການກໍ່ສ້າງສັງຄົມ ສັງຄົມນິຍົມຂອງພວກເຂົາເຈົ້າ ສິ່ງທັງຫມົດນີ້ ເຮັດໃຫ້ທັດສະນະຫລັກຫມັ້ນທາງດ້ານແນວຄິດ–ການເມືອງຂອງຫງວຽນອາຍ – ກວັກ ຫນັກແຫນ້ນ. ບາດນີ້ຫງວຽນອາຍກວັກ ເປັນນັກກອມມູນິດຜູ້ຫນັກແຫນ້ນ ເຊິ່ງໄດ້ຜ່ານໂຮງຮຽນ ເລນິນ ແລະ ກຳແຫນ້ນຫລັກການພື້ນຖານຂອງທິດສະດີ ເລນິນ, ເປັນນັກເຄື່ອນໄຫວທີ່ມີປະສົບການຂອງສະຫະພັນກອມມູນິດໂລກ, ທັງເປັນຜູ້ຕາງຫນ້າ ທີ່ຖືກ

ຮັບຮູ້ຂອງທະວີບອາຊີ ຊຶ່ງລຸກຂຶ້ນຕໍ່ສູ້ປະຕິວັດ ທັງເປັນຜູ້ທີ່ຮູ້ສຶກວ່າຕົນມີກຳລັງແຮງພຽງພໍເພື່ອປະຕິບັດໜ້າທີ່ຕົວຈິງອັນສັບສົນ. ເພິ່ນກະຫາຍຢາກລົງມືປະຕິບັດວຽກງານປະຕິວັດຕົວຈິງ ເຊິ່ງເຮັດໃຫ້ວັນແຫ່ງການປົດປ່ອຍບ້ານເກີດເມືອງນອນຫຍັບມໍ່ເຂົ້າເຖິງວ່າຊ້າກໍ່ຕາມ ແຕ່ກໍ່ແນ່ນອນ.

ຫວງວຽນອາຍກວັກ ຂຽນຈົດໝາຍສະບັບໜຶ່ງເຖິງຄະນະບໍລິຫານງານ ສາກົນກອມມູນິດ, ໃນນັ້ນເພິ່ນໄດ້ຂໍໄປເຄື່ອນໄຫວຢູ່ໃນໝູ່ຊາວຫວຽດນາມຜູ້ລີ້ໄພການເມືອງຢູ່ທີ່ພາກໃຕ້ຈີນ, ຕາມຂ່າວຄາວທີ່ເພິ່ນຮູ້ມາ ຊາວຫວຽດນາມຜູ້ລີ້ໄພການເມືອງຈຳນວນນີ້ຫລູຫລັ່ງມາບ່ອນນີ້ແມ່ນເນື່ອງຈາກຜົນສະທ້ອນຈາກໂຄງການການເມືອງປະຕິວັດຂອງລັດຖະບານ ຊຸນຢັດເຊັນ,ດ້ວຍເຫດນີ້ ຫວງວຽນອາຍກວັກ ຈຶ່ງໄປທີ່ຫ້ອງເຮັດວຽກ ທີ່ເພິ່ນຮູ້ຈັກດີ ໃນຕຶກທຳງານຂອງຄະນະບໍລິຫານງານສາກົນກອມມູນິດທີ່ຕັ້ງຢູ່ຖະໜົນ ຕະໂຣອິດສະກີ. ຢູ່ເທິງປະຕູເຂົ້າຫ້ອງເຮັດວຽກນັ້ນມີປ້າຍນ້ອຍຂຽນວ່າ: "ດ.ຊ.ມານູອິນສະກີ". ມານູອິນສະກີ ແມ່ນ "ພໍ່ຮັກ" ຂອງຫວງວຽນອາຍກວັກ, ແມ່ນ ມານູອິນສະກີ ນັ້ນເອງທີ່ເປັນຜູ້ເປີດໂອກາດໃຫ້ຊາວໜຸ່ມຫວຽດນາມມາຮອດມົດສະກູ, ເຮັດວຽກຢູ່ທີ່ສາກົນກອມມູນິດ ແລະ ກ້າວເຂົ້າຊີວິດໃໝ່ອັນເຕັມໄປດ້ວຍຄວາມຈູບຈ້າວຫ້າວຫັນ. ຢູ່ກອງປະຊຸມໃຫຍ່ຄັ້ງທີຫ້າຂອງສາກົນກອມມູນິດ, ມານູອິນສະກີ ຖືກເລືອກເຂົ້າໃນຄະນະປະທານຄະນະບໍລິຫານງານສາກົນກອມມູນິດ. ເພິ່ນເປັນສະມາຊິກພັກໂບນເຊວິກມາແຕ່ປີ ໑໙໐໓, ຕາມຄວາມຊິນເຄີຍ ບັນດາສະມາຊິກພັກຜູ້ອາວຸໂສມັກເອີ້ນເພິ່ນຕາມຊື່ທີ່ເຄີຍໃຊ້ສະໄໝເຄື່ອນໄຫວໃຕ້ດິນຄື ອີໂອນິດ, ໂຕຈິງແລ້ວທຸກຄົນໃນສາກົນກອມມູນິດເຄົາລົບນັບຖື ມານູອິນສະກີ ເປັນຢ່າງດີ.

ສອງເພື່ອນເກົ່າໂອ້ລົມກັນ ຢ່າງບໍ່ໃຊ້ນາຍພາສາ ເພາະພວກເຂົາເຈົ້າເວົ້າພາສາຝະລັ່ງໄດ້ດີ. ຫລັງຈາກການປະຕິວັດປີ ໑໙໐໕ ພົບກັບຄວາມປະລາໄຊ, ມານູອິນສະກີ ຍົກຍ້າຍໄປຢູ່ປາຣີ ແລະ ຢູ່ແຫ່ງນີ້ເອງ ເພິ່ນໄດ້ຮຽນຈົບວິຊາກົດໝາຍຈາກ ມະຫາວິທະຍາໄລຊອກບອນ.

ມານູອິນສະກີ ຈັບມືຫວງວຽນອາຍກວັກແໜ້ນ ແລະ ຍິ້ມຢ່າງອ່ອນໂຍນແລ້ວຖາມຂຶ້ນວ່າ:

"ເປັນແນວໃດ ສະຫາຍຫວງວຽນອາຍກວັກ, ສະຫາຍກະຫາຍຢາກສູ້ຣົບແມ່ນບໍ?"

"ແມ່ນແທ້ ກອງປະຊຸມໃຫຍ່ຜ່ານມາໄດ້ປະກອບໂຄງການດຳເນີນງານແບບສູ້ຣົບ

ໃຫ້ເປັນຄືອາວຸດໃຫ້ແກ່ກຳມະກອນ. ເຖິງແມ່ນວ່າຢູ່ຫວຽດນາມ ພວກຂ້າພະເຈົ້າຍັງບໍ່ມີພັກກອມມູນິດກໍຕາມ, ແຕ່ຂ້າພະເຈົ້າກໍຕີລາຄາວ່າ ຄຳຮຽກຮ້ອງ ຂອງກອງປະຊຸມໃຫຍ່ໃຫ້ມີການຫັນພັກກອມມູນິດຂອງບັນດາປະເທດທຶນນິຍົມເປັນແບບພັກໂບນເຊວິກ , ໝາຍຄວາມວ່າ ເຮັດໃຫ້ບັນດາພັກກອມມູນິດຕ້ອງເຊື່ອມຊຶມບັນດາຫລັກການແນວຄິດ , ຈັດຕັ້ງ ແລະ ຍຸດໂທບາຍຂອງລັດທິ ໂບນເຊວິກ ກໍທັງເປັນຄຳຮຽກຮ້ອງເຖິງພວກຂ້າ–ພະເຈົ້າເໝືອນກັນ. ພວກຂ້າພະເຈົ້າຈະຕ້ອງສ້າງຕັ້ງພັກຕາມແບບໂບນເຊວິກຂຶ້ນຢູ່ອິນດູຈີນໃຫ້ໄວເທົ່າໃດຍິ່ງດີ. ຂ້າພະເຈົ້າຄິດວ່າມີເງື່ອນໄຂນອກຕົວກ່ຽວກັບວຽກດັ່ງກ່າວ. ຊົນຊັ້ນກຳມະກອນພວກເຮົານັບວັນນັບສະແດງໃຫ້ເຫັນເຖິງກຳລັງຂອງຕົນ,ການຕໍ່ສູ້ຂອງພວກເຂົາເຈົ້າຄ່ອຍໆມີຮູບການຕົວຈິງ ແລະ ມີລັກສະນະສູ້ຮົບ.

ເພື່ອເປັນການໂຕ້ຕອບຕໍ່ການປາບປາມ ຢ່າງໂຫດຮ້າຍສາມານ ຂອງພວກລ່າເມືອງຂຶ້ນນັກຮັກຊາດຢ່າງແທ້ຈິງຈຳນວນໜຶ່ງຈຶ່ງໄດ້ໜີອອກຈາກປະເທດ. ຂ້າພະເຈົ້າມີຂໍ້ມູນທີ່ຢັ້ງຢືນວ່າ ສ່ວນໃຫຍ່ຄົນຈຳພວກນີ້ ໃນປະຈຸບັນອາໄສຢູ່ແຂວງພາກໃຕ້ຂອງຈີນ: ກວາງຕຸ້ງ, ຊຽງໄຮ້, ຮົ່ງກົງ, ມາເກົາ. ຂ້າພະເຈົ້າມອງເຫັນພາລະໜ້າທີ່ ຂອງຕົນນັ້ນຄື ຕ້ອງອອກເດີນທາງໄປພາກໃຕ້ຈີນ ເພື່ອດຳເນີນວຽກງານປະຕິວັດຢູ່ໃນ ໝູ່ເພື່ອນຮ່ວມຊາດຂອງຂ້າພະເຈົ້າ. ຖ້າຮູ້ຈັກດຳເນີນວຽກງານຢ່າງຖືກຕ້ອງ ແນ່ນອນວ່າເຂົາເຈົ້າອາດກາຍເປັນຫລັກແຫລ່ງຂອງພັກກອມມູນິດໃນເວລາຕໍ່ມາ. ຍິ່ງກວ່ານັ້ນ,ແຕ່ພາກໃຕ້ຈີນ ຂ້າພະເຈົ້າອາດຕິດຕໍ່ກັບຫວຽດນາມໄດ້ຢ່າງສະດວກສະບາຍ ແລະ ໂດຍກົງ".

"ສະຫາຍຫວຽນ ຂ້າພະເຈົ້າເຫັນດີຢ່າງສົມບູນນຳຄວາມຄິດຂອງສະຫາຍ.ຂ້າພະເຈົ້າຈະບອກຂ່າວດີແກ່ສະຫາຍດຽວນີ້ໂລດ: ຄະນະບໍລິຫານງານສາກົນກອມມູນິດໄດ້ເຫັນດີຕາມຄຳຂໍຮ້ອງຂອງສະຫາຍ. ສະຫາຍຖືກແຕ່ງຕັ້ງເປັນຜູ້ຕາງໜ້າ ຜູ້ມີອຳນາດເຕັມຂອງຄະນະເລຂາພາກຕາເວັນອອກໄກຂອງຄະນະບໍລິຫານງານສາກົນກອມມູນິດ . ແນ່ນອນ ໜ້າທີ່ຕົ້ນຕໍຂອງສະຫາຍຄື ດຳເນີນວຽກງານແນວຄິດ–ການເມືອງ ແລະ ຈັດຕັ້ງຢູ່ໃນໝູ່ເພື່ອນຮ່ວມຊາດຂອງສະຫາຍ, ກະກຽມເງື່ອນໄຂເພື່ອສ້າງຕັ້ງພັກກອມມູນິດຂຶ້ນຢູ່ທີ່ອິນດູຈີນ. ແຕ່ອີງໃສ່ຄວາມຮູ້ ແລະ ບົດຮຽນຂອງສະຫາຍ ຄະນະບໍລິຫານງານສາກົນກອມມູນິດກໍຍັງມີຄວາມຫວັງວ່າ ໃນກໍລະນີຈຳເປັນສະຫາຍຈະຊ່ວຍເຫລືອບັນດາຜູ້ຕາງໜ້າປະຕິວັດຂອງບັນດາປະເທດອື່ນໆຢູ່ອາຊີອາຄະເນຢ່າງສຸດຈິດສຸດໃຈອີກ.

ເມື່ອເວົ້າເຖິງພາກໃຕ້ຈີນ ສະຫາຍເປັນຝ່າຍເວົ້າຖືກຢ່າງເຕັມປ່ຽມ. ປະຈຸບັນຢູ່ອົງເຂດນີ້ ສະຖານະການອຳນວຍປະໂຫຍດໃຫ້ແກ່ກຳລັງປະຕິວັດທີ່ສຸດ. ລັດຖະບານ-ກວາງເຈົາ, ເຊິ່ງສ້າງຕັ້ງຂຶ້ນໃນຕົ້ນປີ ໑໙໒໓ ນຳໂດຍ ດຣ.ຊຸນຢັດເຊັນ, ຜູ້ນຳ ພັກກົກມິນຕັງ ແລະ ທັງເປັນເພື່ອນຍິ່ງໃຫຍ່ຂອງປະເທດໂຊວຽດ. ຄືດັ່ງສະຫາຍໄດ້ຮູ້ແລ້ວວ່າເດືອນມັງກອນ ປີ ໑໙໒໔ ພັກກົກມິນຕັງຮຽກໂຮມກອງປະຊຸມໃຫຍ່ຄັ້ງທີໜຶ່ງຢູ່ກວາງເຈົາ ແລະ ຢູ່ໃນກອງປະຊຸມໃຫຍ່ຄັ້ງນີ້ ຝ່າຍປະຕິວັດຂອງພັກກໍ່ຍາດເອົາໄຊຊະນະ ມາໄດ້.

ກ່ຽວກັບພັກກົກມິນຕັງ, ລັດຖະບານໂຊວຽດປະຕິບັດຕາມແນວທາງຂອງກອງປະຊຸມໃຫຍ່ຄັ້ງທີສອງສາກົນກອມມູນິດຄື ສະໜັບສະໜູນຢ່າງເຕັມປ່ຽມຕໍ່ຂະບວນການປະຕິວັດປະຊາທິປະໄຕຢູ່ບັນດາປະເທດເມືອງຂຶ້ນ ແລະ ບໍ່ມີເອກະລາດ. ທ່າທີອັນນີ້ ໄດ້ນຳເອົາໝາກຜົນອັນຈົບງາມມາໃຫ້. ບັນດາທີ່ປຶກສາດ້ານການເມືອງ ແລະ ການທະຫານຂອງໂຊວຽດກຳລັງປະຕິບັດວຽກງານໃຫຍ່ໂຕ ແລະ ມີປະໂຫຍດຢູ່ພາກໃຕ້ຈີນ. ຂ້າພະເຈົ້າອາດເວົ້າໄດ້ອີກວ່າ: ສະຫາຍ ມ.ມ.ໂບໂຣດິນ ທີ່ປຶກສາໃຫຍ່ ດ້ານການເມືອງຂອງ ຊຸນ ຢັດເຊັນ ທັງເປັນຜູ້ຕາງໜ້າຂອງສາກົນກອມມູນິດປະຈຳຢູ່ຈີນອີກດ້ວຍ. ເພິ່ນແມ່ນຊາວໂບນເຊວິກຜູ້ອາວຸໂສຄົນໜຶ່ງທີ່ເຄີຍຜ່ານການເຄື່ອນໄຫວໃຕ້ດິນມາຫລາຍປີທັງເປັນຜູ້ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີໜຶ່ງເພື່ອສ້າງຕັ້ງສາກົນກອມມູນິດ.ຂ້າພະເຈົ້າຄິດວ່າ ເມື່ອໄປຮອດພາກໃຕ້ຈີນ, ຖ້າສະຫາຍຫາກໄດ້ຕິດຕໍ່ກັບສະຫາຍ ໂບໂຣດິນ ກໍຈະເປັນການດີທີ່ສຸດ. ການຊ່ວຍເຫລືອຂອງສະຫາຍຜູ້ນັ້ນຍາມໃດກໍ່ມີປະໂຫຍດ. ອີກປະການໜຶ່ງ ໂດຍຜ່ານກົງຈັກຂອງສະຫາຍ ໂບໂຣດິນ, ສະຫາຍອາດສາມາດ ແຈ້ງຂ່າວວຽກງານຂອງຕົນໄປໃຫ້ຄະນະບໍລິຫານງານສາກົນກອມມູນິດຊາບ. ອາດເປັນໄປໄດ້ວ່າບັນຫາທັງໝົດແມ່ນຄືຈັ່ງຊັ້ນລະ. ອວຍພອນສະຫາຍຈົ່ງໄດ້ຮັບໂຊກດີທຸກປະການ". ມານູອິນສະກີ ລຸກຂຶ້ນຍ່າງອອກຈາກໂຕະ ແລ້ວເພື່ອນສອງຄົນກໍ່ຈັບມືກັນແໜ້ນ.

"ຂອບໃຈສະຫາຍທີ່ອວຍພອນໃຫ້ຂ້າພະເຈົ້າດ້ວຍຖ້ອຍຄຳດີງາມໃນເວລາ ທີ່ມາອຳລາຄັ້ງນີ້, ຂ້າພະເຈົ້າຂໍສະແດງຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ",ນຳສຽງຂອງຫວວຽນອາຍກວັກ ສະແດງຄວາມພາກພູມໃຈ "ເມື່ອພົບສະຫາຍ ໃນເທື່ອໜ້າ ຂ້າພະເຈົ້າບໍ່ຮູ້ວ່າການພົບພໍ້ຄັ້ງດັ່ງກ່າວຈະໄວຫລືບໍ່, ຂ້າພະເຈົ້າຈະເປັນຜູ້ຕາງໜ້າໃຫ້ແກ່ພັກກອມມູນິດຂອງປະເທດຊາດຫວຽດນາມທີ່ແສນຮັກຂອງຂ້າພະເຈົ້າ".

ຢູ່ຂອບຟ້າເບື້ອງນັ້ນແມ່ນປະເທດຊາດ

໑

ນັບຕັ້ງແຕ່ມາທີທຳອິດທີ່ຂ້ອຍຢຽບຕະຝັ່ງຂອງເມືອງກວາງເຈົາ ນັ້ນຫວອງຽນອາຍກວັກມີຄວາມຮູ້ສຶກວ່າຕົນຫາຍໃຈຢູ່ໃນບັນຍາກາດທີ່ລຶ້ງເຄີຍຂອງປະເທດຊາດ ຈຶ່ງເກີດມີຄວາມຕື້ນຕັນໃຈ ເພາະວ່າແຕ່ກວາງເຈົາໄປຫາປະເທດຊາດຂອງເພິ່ນບໍ່ໄກອີກແລ້ວ. ຮ້ອຍຢ່າງພັນແນວຢູ່ນີ້ໄດ້ກະຕຸ້ນຈິດໃຈຂອງເພິ່ນໃຫ້ຄິດເຖິງບ້ານເກີດເມືອງນອນ. ດອກເຜິ້ງສົ່ງກິ່ນຫອມຫວນຢູ່ສອງຂ້າງຖະໜົນ, ໃບຕານກາງທິວເໜັງຕິງນວດນາດ ຕາມກະແສລົມ. ລະດູໜາວຢູ່ນີ້ບໍ່ຕ່າງຫຍັງກັບລະດູໜາວຢູ່ບ້ານດອກບົວ, ຝົນຕົກລິນແຊະໆຕະຫລອດທັງວັນ, ເບິ່ງຍອດນ້ຳຝົນຄ້າຍຄືກັບເສັ້ນດ້າຍເປັນໝື່ນເປັນລ້ານໆເສັ້ນຕິງເນືອດນາດ ຢູ່ໃນອາກາດ. ສ່ວນລະດູຮ້ອນນັ້ນຝົນຕົກຄືກັບເທນ້ຳເທທ່າ. ຖະໜົນຫົນທາງຈົມຢູ່ ພື້ນນ້ຳ

ກວ້າງໃຫຍ່ໄພສານຄືໜ້າໜອງຄອງບຶງ. ຫລັງຈາກຝົນເອື້ອນ, ອາຍເຢັນໃນຕອນແລງຂອງລະດູຮ້ອນຍັງຄົງປົກຄຸມຢູ່ນັ້ນ, ແມງຈັກຈັ່ນແຕ່ລະຝູງຕ່າງກໍພ້ອມກັນບິນອອກສົນແສ່ວມາຈັບຢູ່ພຸ່ມໄມ້ໜາຕຶບ ບັດແລ້ວກໍແຂ່ງຂັນກັນຮ້ອງຍື່ວໆເນືອງນັນ.

ເມື່ອແນມເບິ່ງຕາມແມ່ນ້ຳເຈົ້າຢາງ ຫວງວຽນອາຍກວັກ ຮູ້ສຶກວ່າ ຕົນເອງ ໄດ້ແນມເຫັນແມ່ນ້ຳເຣືອງ ແລະ ແມ່ນ້ຳໄຊງ່ອນ ທີ່ເຄີຍພົບໃນຄາວຕົນຍັງນ້ອຍຢູ່ແຫ່ງນີ້ ມີຫລາຍສິ່ງຫລາຍຢ່າງຄ້າຍຄືກັນເຊັ່ນ : ນ້ຳສີແດງຂຸ່ນຄືກັນນີ້, ເຮືອຫາປາຕິດ ໃບລົມຄ້າຍຄືປີກແມງກະເບື້ອ. ຢູ່ຕາມຖະໜົນຫົນທາງ, ພວກຄົນແກ່ລໍ້ໃສ່ໝວກເຟືອງ ໃບໃຫຍ່ເຫື່ອໄຫລໄຄຍ້ອຍ, ພວກເຂົາເຈົ້າຕ່າງກໍແລ່ນໄຕ້ແລ່ນເໜືອເປັນສົນລະວົນ, ເມື່ອເຫັນແລ້ວມັນໂລດບໍ່ຕ່າງຫຍັງກັບພວກແກ່ລໍ້ຢູ່ເວ້, ໄຊງ່ອນຊັ້ນລະ. ເຫັນປະຊາຊົນ ຢູ່ແຫ່ງນີ້ຫັ້ນລະຈຶ່ງເຮັດໃຫ້ເພິ່ນຄິດຮອດບ້ານເກີດເມືອງນອນ. ເບິ່ງທາງຮູບນອກ, ປະຊາຊົນທ້ອງຖິ່ນແຖບນີ້ ກໍບໍ່ມີຫຍັງແຕກຕ່າງໄປຈາກຄົນຫວຽດນາມ, ອີກປະການໜຶ່ງພວກເຂົາເຈົ້າປາກພາສາກວາງຕຸ້ງອັນອ່ອນຊ້ອນມ່ວນຫູທີ່ມີສຳນຽງ ຄ້າຍຄືພາສາຂອງເພິ່ນ.

ດັ່ງດຽວກັນກັບເມື່ອຄາວຢູ່ທີ່ປະເທດລັດເຊຍໂຊວຽດ ເພິ່ນຊ້ຳພັດແປກປະຫລາດໃຈນຳກຳລັງອັນປອດໃສຂອງການປະຕິວັດ. ໂດຍແຕກຕ່າງກັບຄົນຫວຽດນາມທີ່ຖືກທໍລະມານ ດວງຕາຂອງປະຊາຊົນກວາງຕຸ້ງມີແວວສົດໃສ ແລະ ເບີກບານ. ພາກຕາເວັນອອກທີ່ຖືກພວກຈັກກະພັດດູຖູກຢຽບຢ່ຳຕັ້ງເປັນຫລາຍສະຕະວັດ ມາບັດນີ້ກຳລັງ ທັບມ້າງແອກຂ້າທາດລ່າເມືອງຂຶ້ນຢູ່ຢ່າງເດັດດ່ຽວ.

ນັບແຕ່ມື້ທຳອິດທີ່ມາຮອດພຸ້ນຫວງວຽນອາຍກວັກ ກໍໄດ້ເຫັນກັບຕາໃນການເດີນຂະບວນປະທ້ວງຂອງມະຫາຊົນກວາງເຈົາ. ບັນດາການໂຮມຊຸມນຸມມິດຕິງ ທີ່ເກີດຂຶ້ນເອງເພື່ອສະໜັບສະໜູນໂຄງການການເມືອງປະຕິວັດຂອງ ຊຸນ ຢັດເຊັນ ໄດ້ຊຸບັດຂຶ້ນ ຊ້ຳແລ້ວຊ້ຳອີກຢູ່ຫລາຍແຫ່ງຢູ່ກວາງເຈົາ. ຊາວກຳມະກອນເດີນຂະບວນເປັນກ້ອນເປັນໝູ່ແລະຢືນຍາມຢູ່ຕາມຖະໜົນ, ພວກເຂົາເຈົ້າຕິດກາໝາຍພັກ ກົກມິນຕັງ, ນຸ່ງຫົ່ມແບບເຄື່ອງທະຫານ ເຄື່ອງພົນລະເຮືອນ, ຕິດເຄື່ອງໝາຍຢູ່ແຂນ, ພາຍປືນເຫລັກຍາວ, ໃສ່ໝວກຕິດດາວ ໑໘ ແຈ. ສ່ວນຈຸເຢົາວະຊົນນຸ່ງສົ້ງເສື້ອສີຫຍ້າຕາຍແຫ້ງ, ໃສ່ໝວກສີຂາວຄຽນຜ້າພັນຄໍສີແດງພາກັນຍ່າງຢູ່ຕາມຫົນທາງ. ຄຳຂວັນ ໃບປິວຕິດເດຍລະດາດຢູ່ຕາມຝາເຮືອນ, ກຳແພງ, ກະດານໂຄສະນາ. ສ່ວນທຸງສີແດງປັກຢູ່ສອງຂ້າງທາງ,

ແຜ່ນປ້າຍຄຳຂວັນເນັ່ງຂ້າມທາງ.

ກວາງເຈົາຕັ້ງຢູ່ພາກໃຕ້ສຸດຂອງປະເທດຈີນ ແລະ ມີສິດປົກຄອງຕົນເອງຫລາຍສົມຄວນມາແຕ່ດົນນານແລ້ວ. ສິ່ງນີ້ເຮັດໃຫ້ປະຊາຊົນທ້ອງຖິ່ນມີເອກະລັກພິເສດ. ພວກເຂົາເຈົ້າຮັກອິດສະຫລະພາບ ແລະ ມຸ່ງມາດປາດຖະໜາຢາກມີເອກະລາດ. ພວກເຂົາເຈົ້າໄດ້ຮັບເອົາແນວຄິດໃໝ່ຢ່າງວ່ອງໄວ. "ທຸກສິ່ງອັນໃໝ່ແມ່ນລ້ວນແຕ່ມາຈາກກວາງເຈົາ" ນີ້ແມ່ນຄຳເວົ້າຕິດໆຕໍ່ໆກັນຂອງປະຊາຊົນຈີນໃນສະໄໝນັ້ນ. ການເຄື່ອນໄຫວຂອງຊຸນຢັດເຊັນ ແລະ ລັດຖະບານ ຊຶ່ງແມ່ນເພິ່ນເປັນຜູ້ນຳພາ ໄດ້ພິສູດສັດຈະທຳນີ້ຢ່າງຖືກຕ້ອງ.

ໃນເວລາທີ່ຫວງວຽນອາຍກວັກມາຮອດກວາງເຈົາ ເວລາທີ່ກົງກັບ ການປະຕິວັດຊາດປະຊາທິປະໄຕຈີນ ກຳລັງພຸ່ງຂຶ້ນສູ່ລະດັບສຸດຍອດຂອງການຂະຫຍາຍຕົວ ຂອງມັນ. ຊຸນ ຢັດເຊັນ ຜູ້ນຳພາຂອງການປະຕິວັດນັ້ນ ໄດ້ກາຍເປັນເທວະຮູບສັກສິດ ຂອງປະຊາຊົນຈີນທັງໝົດທີ່ມີແນວຄິດກ້າວໜ້າ ນັບທັງຜູ້ຕາງໜ້າຂອງພວກນາຍທຶນ ແຫ່ງຊາດທີ່ໃຫ້ການສະໜັບສະໜູນແກ່ການປະຕິວັດໃນສະໄໝນັ້ນ. ຄົນທົ່ວໄປເຫັນວ່າ ພັກກົກມິນຕັງ ໂດຍແມ່ນຊຸນ ຢັດເຊັນ ເປັນຜູ້ນຳ, ກ່ອນອື່ນໝົດເປັນພັກປະຕິວັດ ຢ່າງແທ້ຈິງພັກໜຶ່ງ ທີ່ຕໍ່ສູ້ເພື່ອການປົດປ່ອຍຊາດ, ຕ້ານການຄອບງຳຂອງພວກຈັກກະພັດ ແລະ ພະເດັດການແບບຂຸນເສິກຈີນຈຳນວນຫລາຍ ທີ່ແບ່ງແຍກປະເທດຈີນເປັນຫລາຍສ່ວນ . ໂດຍໄດ້ຮັບພົນສະທ້ອນຈາກແນວຄິດ ຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ, ໂດຍການຕິດຕໍ່ກັບບັນດາຜູ້ຕາງໜ້າຂອງປະເທດລັດເຊຍໂຊວຽດ ກັບສາກົນກອມມູນິດ ຊຸນ ຢັດເຊັນ ວາງແນວທາງການເມືອງໃໝ່ອອກໃນທ້າຍປີ ໑໙໒໓ ນັ້ນແມ່ນພັນທະພາບກັບພັກກອມມູນິດ, ກັບປະເທດລັດເຊຍໂຊວຽດ, ສະໜັບສະໜູນຂະບວນການຂອງກຳມະກອນ ແລະ ຊາວນາ ແນວທາງການເມືອງໃໝ່ອັນນີ້ ເຮັດໃຫ້ເຫງົ້າພະລັງປະຕິວັດຂອງພັກກົກມິນຕັງ ຍິ່ງເພີ່ມຂຶ້ນເປັນພິເສດ.

ຖືວ່າເປັນຄວາມຜິດພາດອັນຮ້າຍແຮງ ຖ້າບໍ່ນັບເອົາກຳລັງປະຕິວັດອັນໜຶ່ງ ຄືແນວນີ້ໃນການຕໍ່ສູ້ເພື່ອສິດຜົນປະໂຫຍດ ຂອງຊົນຊັ້ນກຳມະກອນຈີນ ເພື່ອປະຊາທິປະໄຕ ແລະ ສັງຄົມນິຍົມ. ດ້ວຍເຫດນັ້ນ ຄະນະບໍລິຫານງານສາກົນກອມມູນິດ ຈຶ່ງໄດ້ແນະນຳໃຫ້ນັກກອມມູນິດຈີນຮ່ວມສຳພັນແໜ້ນກັບພັກກົກມິນຕັງ. ເມື່ອໄດ້ມາຮອດຈີນ, ໂບໂຣດິນໄດ້ເຂົ້າຮ່ວມໂດຍກົງໃນການກະກຽມໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີໜຶ່ງ ຂອງພັກກົກມິນ

ຕັ້ງ. ເຖິງແມ່ນວ່າຢູ່ໃນກອງປະຊຸມໃຫຍ່ຄັ້ງນີ້ຝ່າຍຂວາຂອງພັກກົກມິນຕັ໋ງຕ້ານຄືນກໍ່ຕາມ ແຕ່ພັກກອມມູນິດຈີນກໍ່ຖືກຮັບເອົາເປັນສະມາຊິກຂອງພັກກົກມິນຕັ໋ງໂດຍຮັກສາຄວາມເປັນເຈົ້າຕົນເອງທາງດ້ານການເມືອງແລະການຈັດຕັ້ງ. ບັນດານັກກອມມູນິດຈີນ, ໃນນັ້ນຍັງມີບັນດານັກເຄື່ອນໄຫວທີ່ມີຊື່ສຽງຂອງພັກກອມມູນິດຈີນເຊັ່ນລຽວຈອງຂາຍ, ກູ່ທູແປັກ, ກິມຈຳໜວນໜຶ່ງສ່ວນຫາໃນຄະນະບໍລິຫານງານສູນກາງພັກກົກມິນຕັ໋ງຊຶ່ງແມ່ນ ກອງປະຊຸມໃຫຍ່ເປັນຝ່າຍເລືອກເອົາ. ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມໃຫຍ່ໄດ້ເຫັນດີນຳການແຕ່ງຕັ້ງໂບໂຣດິນ ເປັນທີ່ປຶກສາໃຫມ່ດ້ານການເມືອງຂອງຄະນະບໍລິຫານງານສູນກາງພັກກົກມິນຕັ໋ງ ແລະຂອງລັດຖະບານຈີນພາກໃຕ້. ກອງປະຊຸມໃຫຍ່ຍັງໄດ້ຜ່ານມະຕິເຊີນ ຊ່ຽວຊານການທະຫານໂຊວຽດມາຊ່ວຍກໍ່ສ້າງກຳລັງປະກອບອາວຸດຂອງການປະຕິວັດຈີນຕາມແບບກອງທັບແດງໂຊວຽດ. ທີ່ກອງປະຊຸມໃຫຍ່ຍັງໄດ້ເລືອກຕັ້ງຄະນະກຳມາທິການໜຶ່ງຊຶ່ງແມ່ນ ລຽວຈອງຂາຍ ຜູ້ນຳຝ່າຍຊ້າຍຂອງພັກກົກມິນຕັ໋ງເປັນຫົວໜ້າ ເພື່ອຈັດຕັ້ງ ວິທະຍາຄານທະຫານການເມືອງຢູ່ເທິງດອນຮ່ວາງໂຟຢູ່ປາກແມ່ນ້ຳເຈົາຢາງ.

ຂ່າວຄາວທີ່ຫວງວຽນອາຍກວັກ ມັກເວົ້າເຖິງເລື້ອຍໆໃນການສົນທະນາກັບ ມານູອິນສະກີ ໄດ້ຢັ້ງຢືນແຕ່ຫົວທີແຕ່ມທຳອິດທີ່ເພິ່ນເດີນທາງມາຮອດກວາງເຈົາ. ມີຄົນຫວຽດນາມຫລາຍຄົນໄດ້ມາລີ້ໄພການເມືອງຢູ່ພາກໃຕ້ຈີນ. ສ່ວນໜຶ່ງ ເຂົາເຈົ້າມາແຕ່ປະເທດຝະລັ່ງກໍ່ເພື່ອຢາກຢູ່ໃກ້ກັບປະເທດຊາດຕົນ, ສ່ວນໜຶ່ງອີກແມ່ນມາຈາກອິນດູຈີນເພື່ອຫລົບຫລີກຈາກການຈັບກຸມຂອງເຈົ້າໜ້າທີ່ຕຳຫລວດຝະລັ່ງ. ຊາວຫວຽດນາມ ໄດ້ເຮັດວຽກຢູ່ຕາມບັນດາສຳນັກງານຕ່າງໆຂອງສາທາລະນະລັດກວາງເຈົາ, ຮັບໃຊ້ໃນກອງທັບປະຊາຊົນປະຕິວັດ ຫລືສຶກສາຢູ່ໃນວິທະຍາຄານ ທະຫານການເມືອງຮ່ວາງໂຟ່.

ເມື່ອຄາວຍັງຢູ່ມົດສະກູ, ຜ່ານທາງໜັງສືພິມຈີນ ຫວງວຽນອາຍກວັກ ໄດ້ຮູ້ຈັກກ່ຽວກັບຄະດີລອບສັງຫານ ແມັກແລັງ ຂ້າຫລວງໃຫຍ່ອິນດູຈີນຢ່າງຄາດບໍ່ເຖິງ ຂະນະທີ່ເຂົາເຂົ້າຜ່ານຊາຍຽນ. ເວລາຕໍ່ມາຈຶ່ງຮູ້ວ່າ ຜູ້ລອບສັງຫານແມ່ນ ຟາມຮົ່ງຖາຍ ນັກຮັກຊາດຫວຽດນາມ. ດ້ວຍການສວມບົດເປັນນັກສື່ຂ່າວຄົນໜຶ່ງ, ເຂົາຊຸກເຊື່ອງລູກລະເບີດໄວ້ໃນຊົບກ້ອງຖ່າຍຮູບ, ແລ້ວເລັດລອດເຂົ້າໄປໃນງານກິນລ້ຽງຕ້ອນຮັບແຂກ ຜູ້ມີ

ກຽດຟະລັ່ງ ຊຶ່ງຈັດຂຶ້ນໂດຍອຳນາດປົກຄອງຊາຍປຽມ. ລູກລະເບີດທີ່ຟາມຮົ່ງຖາຍແກວ່ງໃສ່ນັ້ນໄດ້ລະເບີດດັງສະໜັ່ນຫວັ່ນໄຫວ ອັນໄດ້ເຮັດໃຫ້ນາຍທະຫານທີ່ຕິດຕາມ ຕາຍຈຳນວນໜຶ່ງ, ສ່ວນກະໂຕ ແມັກແລັງ ໄດ້ຮັບບາດເຈັບເບົາບາງ. ຟາມຮົ່ງຖາຍໄດ້ເອົາຕົວຫລົບໜີ, ເຂົາແລ່ນມາຮອດຂົວຂ້າມແມ່ນ້ຳເລີຍໂດດລົງນ້ຳຕັ້ງໃຈວ່າຈະລອຍໄປຝັ່ງເບື້ອງນັ້ນ ແຕ່ເຂົາໄດ້ໝົດແຮງເສຍກ່ອນ ແລະ ກະແສນ້ຳເຈົາຢາງໄດ້ພັດເອົາ ຊາວໜຸ່ມວິລະຊົນຈົມລົງພື້ນນ້ຳ.

ອຳນາດການປົກຄອງຊາຍປຽມໄດ້ຖົ້ມໂທດໃສ່ລັດຖະບານກວາງເຈົາໃນທັນທີວ່າ: "ເປັນລັດຖະບານທີ່ນິຍົມອະນາທິປະໄຕແບບໂບນເຊວິກ" ແລະປະປ່ອຍໃຫ້ມີພວກກໍ່ການຮ້າຍ. ລຽວຈອງຂາຍ ທີ່ເປັນເຈົ້າແຂວງກວາງເຈົາໃນເວລານັ້ນ ໄດ້ຄັດຄ້ານ ຢ່າງເຄັ່ງຂຶມຕໍ່ອຳນາດປົກຄອງຊາຍປຽມ, ເພິ່ນຢືນຢັດປົກປ້ອງນັກຮັກຊາດຫວຽດນາມ ທີ່ໄດ້ເສຍສະຫລະ ແລະ ບັນດາເພື່ອນຮ່ວມຮົບຂອງເຂົາ. ເພິ່ນໄດ້ອະນຸຍາດໃຫ້ ເພື່ອນມິດຂອງຟາມຮົ່ງຖາຍໄປສິ່ງສະການເຂົາຢູ່ສຸສານສູນກາງກວາງເຈົາໃກ້ກັບຫລຸມຝັງສົບຂອງບັນດານັກປະຕິວັດຈີນຜູ້ເສຍຊີວິດ.

ຫລັງຈາກທີ່ຫງວຽນອາຍກວັກປັບຕົວເຂົ້າກັບບັນຍາກາດໃໝ່ແລ້ວ ເພິ່ນເລີ່ມເຄື່ອນໄຫວຊອກພົບບັນດາເພື່ອນສູ້ຮົບຂອງຟາມຮົ່ງຖາຍວິລະຊົນຜູ້ໜຸ່ມນ້ອຍ. ວຽກງານນີ້ເຮັດໄດ້ຢ່າງວ່ອງໄວ, ທັງນີ້ກໍເພາະວ່າສຽງຊ່າລືຂອງ "ຄະດີລອບສັງຫານ ຢູ່ຊາປຽມ" ຍັງເປັນເລື່ອງສົດໆຮ້ອນໆຢູ່ໃນວົງການເມືອງຂອງນະຄອນ. ຍິ່ງກວ່ານັ້ນ ເພິ່ນຍັງໄດ້ຮັບຄວາມຊ່ວຍເຫລືອຈາກບັນດາທີ່ປຶກສາໂຊວຽດ ທີ່ຮັກສາການຕິດຕໍ່ໄວ້ກັບນັກຮັກຊາດຫວຽດນາມຈຳນວນໜຶ່ງ.

ການພົບພໍ້ກັບບັນດາຜູ້ທີ່ຮ່ວມແນວຄິດດຽວກັບຟາມຮົ່ງຖາຍໄດ້ເກີດຂຶ້ນ ຢູ່ເຮືອນນ້ອຍໆຫລັງໜຶ່ງທີ່ຂີ້ເຮີ້ຂີ້ຮ້າຍທີ່ສຸດ, ບັນດາເຮືອນນ້ອຍໆຄືຈັ່ງຊີ້ມີຈຳນວນບໍ່ໜ້ອຍ ໃນເຂດອາໄສຂອງຄົນຈີນຢູ່ໃນຕົວເມືອງ. ເມື່ອແນມອອກຜ່ານທາງປ່ອງຢ້ຽມຈະເຫັນທາງອັນແຄບໆຈົນເກືອບເວົ້າໄດ້ວ່າ ລໍ້ແກ່ໄປພາບດຽວສອງຄັນບໍ່ໄດ້ພົ້ນລະ. ໂຮ່ຕຸ່ງເມົາ , ເລີ່ງເຊີນ, ເລີ່ງຟອງ ຕ່າງກໍໄດ້ບອກຊື່ຂອງຕົນໃຫ້ຫງວຽນຮູ້ດ້ວຍສຳນຽງເງ່ອານທີ່ບໍ່ປະປົນກັບສຳນຽງທ້ອງຖິ່ນອື່ນ. ພວກເຂົາເຈົ້າທັງສາມຄົນລ້ວນແຕ່ ເປັນຄົນໄທບ້ານດຽວກັນກັບຫງວຽນອາຍກວັກ. ເພິ່ນສົນໃຈ ເລີ່ງຟອງ ເປັນພິເສດ ຫລື ຊື່ໜຶ່ງ ວ່າ "ລົມແດງ", ເຂົາເປັນຊາວໜຸ່ມບ່າກວ້າງ, ຮູບຮ່າງແຂງແກ່ນ, ສີໜ້າເຄັ່ງຂຶມ,

ໜ້າຜາກສູງ.

ບັນດາຄົນໜຸ່ມໆ ທ່າທີເກີງເຂີນໆນີ້ຄ້າຍຄືວ່າຫາກໍພັດພາກຈາກຄອບຄົວ, ໜີຈາກຕັ່ງນັ່ງຂອງໂຮງຮຽນມື້ວານນີ້ເທົ່ານັ້ນ, ແຕ່ພວກເຂົາເຈົ້າມີມືອັນຄ່ອງແຄ້ວທັງສອງເບື້ອງຂອງຊາວກຳມະກອນ, ສ່ວນດວງຕາທັງຄູ່ຂອງພວກເຂົາເຈົ້າມີແວວ ແຫ່ງການມອງກວ້າງເຫັນໄກໂດຍບໍ່ຫວາດຫວັ່ນເກງຂາມ ມັນເປັນປະກາຍ ແຫ່ງຄວາມປາດຖະໜາຢາກສູ້ຣົບ. ຊາວບ້ານຫວຽດນາມເຄີຍເວົ້າວ່າ: "ໄມ້ໄຜ່ອ່ອນເບັດງ່າຍ". ແຕ່ວ່າ ບັນດາຊາວໜຸ່ມຮຸ່ນນີ້ຊ້ຳພັດບໍ່ເປັນຄືຈັ່ງຊີ້. ພວກເຂົາເຈົ້າແຕກຕ່າງຢ່າງຂາດຂັ້ນ-ກັບຄົນຫວຽດນາມຮັກຊາດຫລາຍໆຄົນທີ່ຫງວຽນອາຍກວັກໄດ້ພົບພໍ້ແຕ່ຄາວຍັງນ້ອຍ ຢູ່ໃນປະເທດກໍ່ຄືກັບເວລາທີ່ເພິ່ນດຳລົງຊີວິດຢູ່ບົນດິນແດນຝະລັ່ງ. ນັ່ງຢູ່ຕໍ່ໜ້າເພິ່ນ ແມ່ນບັນດາຜູ້ຕາງໜ້າຂອງຄົນຮຸ່ນໃໝ່ທີ່ຕ້ານລະບອບລ່າເມືອງຂຶ້ນ. ໂຊກຊາຕາ ຂອງພວກເຂົາເຈົ້າປຽບເໝືອນຢອດນ້ຳທີ່ສະທ້ອນການປ່ຽນແປງຢ່າງເລິກເຊິ່ງທີ່ເກີດຂຶ້ນຢູ່ຫວຽດນາມ ຊຶ່ງໃນຂະນະທີ່ ຫງວຽນອາຍກວັກ ເຄື່ອນໄຫວຢູ່ຕ່າງປະເທດ, ພິເສດໃນໄລຍະຫລັງສົງຄາມຄັ້ງທີໜຶ່ງ.

ສົງຄາມໄດ້ເຮັດໃຫ້ຊົນຊັ້ນນາຍທຶນຝະລັ່ງອ່ອນເພຍລົງ, ດ້ວຍເຫດນີ້ ພວກເຂົາຈຶ່ງເລີ່ມເກັບກວາດເອົາຊັບສິນເງິນຄຳອອກຈາກບັນດາເມືອງຂຶ້ນ ເພີ່ມຂຶ້ນເປັນສອງເທົ່າ. ທຶນຝະລັ່ງທີ່ໄດ້ສູນເສຍອົງເຂດອັນເປັນມູນເຊື້ອການລົງທຶນຂອງຕົນຍ້ອນສົງຄາມ ໂດຍສະເພາະຫລັງຈາກປະເທດລັດເຊຍຖອນຕົວອອກຈາກລະບົບທຶນນິຍົມໂລກ, ກໍ່ໄດ້ຫລັ່ງໄຫລເຂົ້າມາໃນອິນດູຈີນຢ່າງວ່ອງໄວກວ່າເກົ່າ. ຢູ່ຫວຽດນາມອຸດສາຫະກຳ ຂະຫຍາຍຕົວຢ່າງແຂງແຮງ. ທາງລົດໄຟ ແລະ ທາງລົດໄດ້ຖືກສ້າງຂຶ້ນ ຢູ່ທົ່ວທຸກແຫ່ງ ໂຮງຈັກ, ໂຮງງານ, ທ່າເຮືອໄດ້ຮັບການກໍ່ສ້າງຂຶ້ນ. ຢູ່ຕາມບັນດາຕົວເມືອງ ບັນດາວິສາຫະກິດອຸດສາຫະກຳການຄ້າ ທະນາຄານເກີດຂຶ້ນຄືດອກເຫັດ. ຢູ່ຊົນນະບົດ ໄດ້ມີການປູກຕົ້ນຢາງ ແລະ ຕົ້ນໄມ້ອຸດສາຫະກຳອື່ນໆ ສ່ວນຂະໜາດໃຫຍ່. ໄປພ້ອມໆ ກັນກັບທີ່ກຳໄລຂອງພວກລ່າເມືອງຂຶ້ນເພີ່ມຂຶ້ນ, ຖັນແຖວຊົນຊັ້ນກຳມາຊີບຫວຽດນາມນັບວັນເຕີບໃຫຍ່ຂຶ້ນ. ຕົ້ນຊຸມປີ ໒໐, ຊົນຊັ້ນກຳມາຊີບຫວຽດນາມໄດ້ປະກົດຕົວຂຶ້ນຢູ່ເທິງເວທີການເມືອງ ຢ່າງເດັດດ່ຽວກວ່າເກົ່າ. ການຕໍ່ສູ້ຂອງພວກເຂົາເຈົ້າກາຍຂອບເຂດແຫ່ງການປະທ້ວງອັນຈຳກັດຂອງການຕ້ານສະພາບການບໍ່ຍຸຕິທຳດ້ານເສດຖະກິດ ແລະ ນັບມື້ນັບຫັນໄປໃຊ້ຮູບການຕໍ່ສູ້ດ້ວຍການເດີນຂະບວນປະທ້ວງດ້ານການເມືອງ.

ດ້ວຍຈຸດປະສົງຢາກເປີດກວ້າງພື້ນຖານເສດຖະກິດ-ການເມືອງ ຂອງແອກຄອບຄອງລ່າເມືອງຂຶ້ນ, ອຳນາດການປົກຄອງຝະລັ່ງໄດ້ດຳເນີນການປະຕິຮູບແບບເສລີນິຍົມເປັນຂັ້ນໆຢູ່ຫວຽດນາມ, ກ່ອນອື່ນໝົດແມ່ນຢູ່ໃນຂົງເຂດການສຶກສາ, ບັນດາການປະຕິຮູບດັ່ງກ່າວຍາມໃດກໍຕິດຕາມດ້ວຍບັ້ນຣົບໂຄສະນາອຶກກະທຶກຄຶກໂຄມກ່ຽວກັບ " ພາລະກິດແຜ່ພາຍຄວາມສີວິໄລຂອງຝະລັ່ງເມືອງແມ່". ບັນດາຜູ້ຂຽນຮັບຈ້າງ ປະກົດຕົວຢູ່ເທິງເວທີ, ພວກເຂົາຍ້ອງຍໍຄວາມສີວິໄລແບບຕາເວັນຕົກ, ຮ້ອງໂຮສຸດສຽງ ກ່ຽວກັບຜົນປະໂຫຍດຂອງ"ການຮ່ວມມືຝະລັ່ງ-ຫວຽດ".

ພ້ອມດຽວກັນ ບັນດາການປະຕິຮູບທາງດ້ານການສຶກສາກໍ່ໄດ້ເປີດໂອກາດສຳລັບຂະບວນວິວັດອື່ນໆ. ຕົວອັກສອນແບບໃໝ່ຂອງຫວຽດນາມໄດ້ຮັບການເຜີຍແຜ່ຢ່າງວ່ອງໄວໄປທົ່ວປະເທດ. ປຶ້ມອ່ານ ແລະ ໜັງສືພິມທີ່ຖືກພິມອອກເປັນຕົວອັກສອນ ຂອງຊາດນັບວັນນັບຫລາຍຂຶ້ນ. ຊາວຫວຽດນາມທີ່ໄດ້ຮັບການສຶກສາ, ສ່ວນໃຫຍ່ແມ່ນນັກຮຽນ, ນັກສຶກສາໄດ້ຫັນໄປອ່ານປຶ້ມ ໜັງສືພິມທຸກຊະນິດເປັນພາສາຫວຽດ, ພາສາຈີນ ແລະ ພາສາຝະລັ່ງ ຊຶ່ງສົ່ງເຂົ້າມາຫວຽດນາມ ພາຍຫລັງຈາກການເລັດລອດຕາໜ່າງ ກວດກາຂອງເຈົ້າໜ້າທີ່ຕຳຫລວດ. ຄົນທົ່ວໄປຕິດໃຈອ່ານ ພວກເຂົາເຈົ້າອ່ານຈົນປຶ້ມຂາດກິດ-ຂາດທ່ອງໂດຍສະເພາະແມ່ນປຶ້ມທີ່ເວົ້າເຖິງບັນຫາສັງຄົມ-ການເມືອງອັນສຳຄັນ ເຊິ່ງໃນຫວຽດນາມທີ່ຖືກລະບອບລ່າເມືອງຂຶ້ນ ແລະ ສັກດີນາບີບຮັດນັ້ນບໍ່ສາມາດຮູ້ໄດ້.

ຖ້າວ່າ ໃນລະຫວ່າງຊຸມປີແຫ່ງການພະເນຈອນຢ່າງທໍລະມານຢູ່ຕ່າງປະເທດ - ຫງວຽນໄດ້ບັນລຸຍອດສູງແຫ່ງຄວາມຮູ້ທາງດ້ານສັງຄົມ-ການເມືອງ ທັງເປັນຜູ້ຍຶດຖືແລະປົກປັກຮັກສາທິດສະດີປະຕິວັດອັນກ້າວໜ້າທີ່ສຸດໄດ້ຢ່າງຫ້າວຫັນ ເຊິ່ງໄດ້ແກ່ລັດທິເລນິນ, ສ່ວນຢູ່ປະເທດຊາດຂອງເພິ່ນຄົນຮຸ່ນລາວຄາວດຽວກັບເພິ່ນ ແລະ ຮຸ່ນຕໍ່ມາ ຊ້ຳພັດ ຍັງງົມທາວຢູ່ໃນຄວາມມືດມົນ, ສະນັ້ນພວກເຂົາເຈົ້າຈຶ່ງກະຫາຍຢາກເຂົ້າໃຈຄວາມສຳນຶກ-ອັນໃໝ່ ກ່ຽວກັບອິດສະຫລະພາບ, ສະເໝີພາບ, ພະລາດອນພາບ, ແນວຄິດ ຂອງຄົນຝະລັ່ງຜູ້ນຳເອົາແສງສະຫວ່າງມາໃຫ້. ພວກເຂົາເຈົ້າອ່ານບົດກອນ ອັນໂສກເສົ້າຂອງເລື່ອງຂາຍຊຽວ, ບົດກອນທີ່ປຸກລະດົມຄວາມພາກພູມໃຈໃນຊາດຕົນ ແລະ ພາໃຫ້ເກີດມີແນວຄິດຢາກປ່ຽນແປງ. ເຂົາເຈົ້າສົມທຽບຈຸດດີ ແລະ ຈຸດອ່ອນຂອງລັດທິ ການເມືອງຕ່າງໆ ເຊັ່ນທິດສະດີ "ຫລັກການການເມືອງສາມຂໍ້" ຂອງ ຊຸນ ຢັດເຊັນ,ຫລັກທິດສະດີ "ອະຫິງສາ (ແປວ່າການຕໍ່ສູ້ຢ່າງບໍ່ໃຊ້ຄວາມຮຸນແຮງ) " ຂອງຄານທີ, ທິດ

ສະດີສັງຄົມນິຍົມປະເພດຕ່າງໆຂອງປຣູດົງ, ບລັງກີ ແລະ ຂອງບັນດານັກໄຝ່ຝັນລອຍ-ເມກ. ພາຍຫລັງການສ້າງຕັ້ງພັກກອມມູນິດຝະລັ່ງບໍ່ດົນ, ຢູ່ຫວຽດນາມໄດ້ປະກົດມີ ບັນດາບົດນິພົນຂອງ ກ.ມາກ ແລະ ວ.ອີ.ເລນິນ ເປັນພາສາຝະຫລັ່ງເທື່ອລະກ້າວ. ບັນດາບົດນິພົນເຫລົ່ານັ້ນໄດ້ຖືກນຳເຂົ້າມາຫວຽດນາມຢ່າງລັບໆ ໂດຍທາງທະເລ. ດັ່ງນັ້ນໃນເບື້ອງຕົ້ນຈຶ່ງມີຄົນອ່ານຫນ້ອຍທີ່ສຸດ ແຕ່ແນວຄິດທີ່ບັນຈຸຢູ່ໃນບົດນິພົນດັ່ງກ່າວພັດຖືກນຳໄປເຜີຍແຜ່ຢ່າງວ່ອງໄວ, ຍ້ອນບັນດາເມັດພັນດັ່ງກ່າວໄດ້ປູກໄວ້ໃນແຜ່ນດິນອັນອຸດົມສົມບູນທີ່ໄດ້ກະກຽມຮັບຢູ່ແລ້ວ. ຖ້າປຽບໃສ່ເອີລົບ ກໍແມ່ນຊ້າກວ່າຕັ້ງຫລາຍສິບປີ ສັບການເມືອງ ແລະ ຄວາມສຳນຶກເຊັ່ນ "ຊົນຊັ້ນນາຍທຶນ", "ຊົນຊັ້ນກຳມາຊີບ", " ສິດຕັດສິນດ້ວຍຕົນເອງ", "ລັດທິຈັກກະພັດ", "ລັດທິລ່າເມືອງຂຶ້ນ", "ການປະຕິວັດປະຊາທິປະໄຕນາຍທຶນ" ແລະ ອື່ນໆ ຈຶ່ງປະກົດຕົວ ແລະ ກາຍເປັນສິ່ງທີ່ນິຍົມໃຊ້ໃນຫມູ່ຊາວຫວຽດນາມທີ່ມີລະດັບການສຶກສາ ກໍຄືໃນພາສາຫວຽດນາມເອງ.

ຄົນຜູ້ທີ່ຫາກໍຮູ້ຈັກກັນໃຫມ່ໆ ໄດ້ເລົ່າສູ່ຫງວຽນອາຍກວັກຟັງວ່າ ກ່ອນຫນ້ານີ້ພວກເຂົາເຈົ້າເຂົ້າຮ່ວມໃນ "ສະມາຄົມຟື້ນຟູຫວຽດນາມ" ໂດຍແມ່ນພໍ່ເຖົ້າ ຟານໂບ່ຍເຈົາ ເປັນນັກແນວຄິດ. ສະມາຊິກຂອງສະມາຄົມສ່ວນໃຫຍ່ແມ່ນບັນດາຜູ້ຮັກຊາດທີ່ມີບຖືທິດສະດີຂົງຈື້ ຫລາຍຄົນມີອາຍຸສູງ. ການເຄື່ອນໄຫວອັນຕົ້ນຕໍຂອງເຂົາເຈົ້າແມ່ນກ່າວປະນາມພວກລ່າເມືອງຂຶ້ນຝະລັ່ງດ້ວຍບົດກອນ ຢູ່ທີ່ບັນດາການປະຊຸມ ແລະ ການພົບປະກັບມວນຊົນ, ສ່ວນວຽກງານຕົວຈິງນັ້ນ ທາງສະມາຄົມບໍ່ມີຄວາມສາມາດເຮັດ. ຊາວຫນຸ່ມຈຳນວນຫນຶ່ງຢູ່ໃນສະມາຄົມບໍ່ເຫັນດີນຳການເຄື່ອນໄຫວແບບທ່າຮັບຂອງ ຟານໂບ້ຍເຈົາ ແລະ ພັກພວກຂອງເພິ່ນ. ສູກທາຍ ໂຮ່ຕູ່ງເມົາ, ເລຮົ່ງເຊີນ ກໍເປັນຜູ້ ລິເລີ່ມສ້າງຕັ້ງອົງການຈັດຕັ້ງສູ້ລົບປິດລັບ "ເຕີນເຕີນສາ". ບັນດາຊາວຫນຸ່ມຮັກຊາດ ທີ່ເຂົ້າຮ່ວມໃນອົງການຈັດຕັ້ງນີ້ເອົາການກໍກວນບຸກຄົນເປັນຄືການເຄື່ອນໄຫວອັນຕົ້ນຕໍ.

ການລອບສັງຫານ ແມັກແລັງ ບໍ່ສຳເລັດ ແລະ ການຕາຍ ຢ່າງຫນ້າສົງສານຂອງຟານຮົ່ງຖາຍ, ຫນຶ່ງໃນບັນດານັກຮົບຜູ້ດີເດັ່ນຂອງອົງການຈັດຕັ້ງ, ເຮັດໃຫ້ສະມາຊິກຈຳນວນຫນຶ່ງຢູ່ໃນ "ເຕີນເຕີນສາ" ລັ່ງໆເລໆ. ພວກເຂົາເຈົ້າປຽບເຫມືອນຄົນ ທີ່ຢືນຢູ່ກາງທາງສາມແຍກ, ພວກເຂົາເຈົ້າໄດ້ຍິນໄດ້ຟັງຫລາຍທີ່ສຸດກ່ຽວກັບ ປະເທດລັດ

ເຊຍໂຊວຽດ, ກ່ຽວກັບບັນດາທີ່ປຶກສາໂຊວຽດ ທີ່ເຮັດວຽກຢູ່ໃນລັດຖະບານ ຊຸນ ຢັດ ເຊັນ, ແຕ່ຫງວຽນອາຍກວັກແມ່ນຄົນຫວຽດນາມຜູ້ທຳອິດທີ່ "ມາແຕ່ພຸ້ນ", ສະນັ້ນພວກເຂົາເຈົ້າຈຶ່ງຕັ້ງຫນ້າຟັງຄຳເວົ້າແຕ່ລະຄຳຂອງເພິ່ນ.

"ອ້າຍນ້ອງທັງຫລາຍ, ຄົງບໍ່ມີຄົນຫວຽດນາມຜູ້ຮັກຊາດຄົນໃດດອກທີ່ບໍ່ນັບຖືວິລະກຳສູ້ຮົບອັນມີຄ່າອະມະຕະຂອງຟາມຮົ່ງຖາຍ", ຫງວຽນອາຍກວັກເລີ່ມສົນທະນາ ດ້ວຍຄວາມເວົ້າຄືແນວນີ້, "ເລືອດຂອງບັນດາຜູ້ເສຍສະຫລະທີ່ຖອກເທທາແຜ່ນດິນຈະເກີດມີຊີວິດຂຶ້ນຢ່າງວ່ອງໄວ. ການເສຍສະຫລະຂອງຟາມຮົ່ງຖາຍ ຈະກາຍເປັນນົກແອ່ນນ້ອຍຮ້ອງເປັນສັນຍານບອກວ່າໃນບໍ່ດົນນີ້ລະດູບານໃຫມ່ຈະມາຮອດ. ຊື່ສຽງຂອງວິລະຊົນ ຜູ້ຫນຸ່ມນ້ອຍຈະຍືນຍົງຢູ່ຢ່າງອະມະຕະ ເພາະວ່າເຂົາສະຫລະຊີວິດຕົນໃຫ້ແກ່ໄຊຊະນະໃນອະນາຄົດຢ່າງບໍ່ລັງເລໃຈ. ແຕ່ວ່າອ້າຍນ້ອງທັງຫລາຍ, ເຊື່ອວ່າເສັ້ນທາງທີ່ ອົງການຈັດຕັ້ງຂອງພວກເຈົ້າເລືອກເອົານັ້ນມັນຖືກແລ້ວຫລືບໍ່ ?

ຂ້າພະເຈົ້າຫາກໍກັບມາຈາກປະເທດລັດເຊຍຫວ່າງບໍ່ດົນມານີ້, ພວກເຂົາເຈົ້າກໍເລີ່ມເຮັດແຕ່ວຽກຄືຈິງຈັງຊຸ້ມລະ. ແມ່ນແຕ່ອ້າຍຂອງເລນິນເອງກໍຍັງເຂົ້າຮ່ວມ ໃນການກະກຽມການລອບສັງຫານພະເຈົ້າຊາ ແລະ ຖືກປະຫານຊີວິດເສຍ. ແຕ່ບັນດານັກປະຕິວັດລັດເຊຍກໍຊອກເຫັນເສັ້ນທາງອັນຖືກຕ້ອງຢ່າງວ່ອງໄວພໍສົມຄວນ. ນັ້ນກໍຄືເສັ້ນທາງກໍ່ສ້າງພັກເອກະພາບທີ່ປະກອບທິດສະດີປະຕິວັດອັນຖືກຕ້ອງເປັນຄືອາວຸດຂອງພັກນັ້ນ. ຢາກປົດປ່ອຍປະເທດຊາດຕົນ, ພວກເຮົາຕ້ອງໄປຕາມເສັ້ນທາງດັ່ງກ່າວ, ຢາກເຮັດໄດ້ ຄືຈັ່ງຊັ້ນກໍຕ້ອງມີຄວາມຮູ້ ໂດຍສະເພາະທາງດ້ານການເມືອງ. ສະນັ້ນໃນເບື້ອງຕົ້ນ ຂ້າພະເຈົ້າຈຶ່ງຢາກສະເຫນີວ່າ ຄວນໄຂຊຸດຮຽນການເມືອງໃຫ້ແກ່ນັກປະຕິວັດຜູ້ຫນຸ່ມນ້ອຍຢູ່ກວາງເຈົາແຕ່ດຽວນີ້ໂລດ".

໔

ວັນທີ ໑໘ ເດືອນມັງກອນ, ຫງວຽນອາຍກວັກສົ່ງຈົດຫມາຍເຖິງຄະນະປະທານຄະນະບໍລິຫານງານ ສາກົນກອມມູນິດ, ໃນຈົດຫມາຍ ມີບາງຕອນຂຽນວ່າ: "ຂ້າພະ

ເຈົ້າມາຮອດກວາງເຈົ້າກາງເດືອນທັນວາ. ໃນເວລານີ້ ຂ້າພະເຈົ້າ ໄດ້ເປັນຄົນຈີນ ແລະ ບໍ່ແມ່ນຄົນຫວຽດນາມອີກແລ້ວ, ຊື່ຂອງຂ້າພະເຈົ້າຄື ຫລີຊຸຍ ແຕ່ບໍ່ແມ່ນ ຫງວຽນ ອາຍກວັກ...ຂ້າພະເຈົ້າໄດ້ພົບນັກປະຕິວັດຊາດນິຍົມຫວຽດນາມສອງສາມຄົນຢູ່ນີ້. ຂ້າພະເຈົ້າໄດ້ຄັດເລືອກເອົາຄົນຫວຽດນາມຈຳນວນ ໕ ຄົນທີ່ມີຖຸນຖານຄົນລະແຂວງ ... ຂ້າພະເຈົ້າຈະອົບຮົມໃຫ້ພວກເຂົາເຈົ້າຮູ້ຈັກວິທີການຈັດຕັ້ງ ".

ຕໍ່ມາບໍ່ດົນ ຢູ່ປະຕູເຮືອນເລກທີ ໑໓ (ເຮືອນຕຶກສາມຊັ້ນຫລັງໜຶ່ງ, ອອກແບບກໍ່ສ້າງຕາມເຂດອາກາດຮ້ອນ) ຕັ້ງຢູ່ເທິງຖະໜົນວັນມິນລູ, ຕິດປ້າຍນ້ອຍທີ່ມີໃຈຄວາມວ່າ: "ຄະນະກຳມະການກໍ່ສ້າງທາງດ້ານການເມືອງພິເສດ". ຢູ່ທີ່ຝາຂອງຫ້ອງຮຽນກວ້າງໃຫຍ່ຊັ້ນສາມໄດ້ແຂວນຮູບຖ່າຍ ກ.ມາກ, ເລນິນ, ສະຕາລິນ, ຊຸນ ຢັດເຊັນ ແລະ ຟານຮົ່ງທາຍ. ຜູ້ທີ່ເຂົ້າຮຽນຊຸດຮຽນການເມືອງນີ້ເປັນຊາວໜຸ່ມຮັກຊາດທີ່ມາແຕ່ຫວຽດນາມໂດຍກົງ, ພວກເຂົາເປັນຜູ້ໂຊກດີທີ່ບໍ່ຖືກຈັບ. ພວກເຂົາເຈົ້າແນມເບິ່ງ ຮູບຖ່າຍແຕ່ລະແຜ່ນດ້ວຍທ່າທີເຄົາລົບນັບຖື.

ພວກເຂົາເຈົ້າຈົດຈຳໄປເຖິງຊີວິດຄຳເວົ້າບາງຄຳຂອງຄົນຜູ້ໜຶ່ງທີ່ສະເໜີ ຕົວເອງວ່າ "ສະຫາຍເວືອງ" ຢູ່ໃນພິທີເປີດຊຸດຮຽນໃໝ່.

"ກ່ອນອື່ນໝົດ ນັກປະຕິວັດຕ້ອງກຳແໜ້ນຫຍັງແດ່?" ສະຫາຍຖາມ ບັນດານັກຮຽນແລ້ວກໍ່ຕອບເອງວ່າ: "ຕ້ອງກຳແໜ້ນທິດສະດີປະຕິວັດອັນຖືກຕ້ອງ. ນັກປະຕິວັດ-ເຊິ່ງກຳແໜ້ນທິດສະດີປະຕິວັດອັນຖືກຕ້ອງແລ້ວ ຄືກັນກັບຄົນເດີນທາງທີ່ຖືໂຄມໄຟເຍືອງທາງໃຫ້ແກ່ຕົນເອງໃນຕອນກາງຄືນອັນມືດມົນ. ປະຈຸບັນນີ້ຢູ່ໃນໂລກມີລັດທິ ແລະ ທິດສະດີບໍ່ໜ້ອຍ ແຕ່ວ່າລັດທິທີ່ມີສັດຈະທຳທີ່ສຸດ ໝັ້ນແໜ້ນທີ່ສຸດ ແລະ ປະຕິວັດທີ່ສຸດ ກໍ່ແມ່ນລັດທິເລນິນ".

ຫລັກສູດການຮຽນແມ່ນກວ້າງຂວາງພໍສົມຄວນ. ບັນດານັກຮຽນໄດ້ຮ່ຳຮຽນ ສະພາບການຂອງໂລກ, ປະຫວັດຂອງການປະຕິວັດເດືອນຕຸລາ, ປະຫວັດຂອງສາມສາກົນ ຂະບວນການປົດປ່ອຍຊາດ, ໂຄງການການເມືອງຂອງ ຊຸນ ຢັດເຊັນ. ໃນການຮ່ຳຮຽນພວກເຂົາເຈົ້າເອົາໃຈໃສ່ພິເສດຕໍ່ວິຊາເສດຖະສາດ, ວິຊາໜັງສືພິມ, ພື້ນຖານຄວາມຮູ້ກ່ຽວກັບວຽກງານຈັດຕັ້ງມະຫາຊົນ ແລະ ພາສາຕ່າງປະເທດ. ສ່ວນໜຶ່ງຂອງບົດຮຽນແມ່ນ ອາຈານວິທະຍາຄານທະຫານການເມືອງ ຮ່ວາງໂຟເປັນຜູ້ບັນຍາຍ."ຄະນະກຳມະການກໍ່ສ້າງທາງດ້ານການເມືອງພິເສດ" ຖືກອຳນາດປົກຄອງຈີນ ຖືເປັນ ສາ

ຂາຫນຶ່ງພິເສດຂອງວິທະຍາຄານ ຮ່ວາງໂພ ທີ່ເຄື່ອນໄຫວໃຕ້ການອາລັກຂາຂອງວິທະຍາຄານດັ່ງກ່າວ. ແຕ່ອາຈານສອນທີ່ສຳຄັນຂອງຊຸດຮຽນແມ່ນຫວງວຽນອາຍກວັກ. ເພິ່ນຊູທິດເວລາຫວ່າງທັງຫມົດໃຫ້ແກ່ຊຸດຮຽນ.

ຜູ້ທີ່ເຂົ້າຊຸດຮຽນດັ່ງກ່າວ ເລົ່າຄືນວ່າ ສະຫາຍເວືອງ ຍັງຫນຸ່ມແຫນ້ນຢູ່ ອາຍຸກໍ່ຍັງບໍ່ຮອດ ໓໕ ປີຊ້ຳ. ເພິ່ນເປັນຄົນຄິງບາງ ດວງຕາແວວສົດໃສ ເປັນພິເສດ, ມັກນຸ່ງທົ່ມເສື້ອສີຂີ້ເທົ່າ ແບບເຄິ່ງທະຫານ ຕາມແບບເຄື່ອງນຸ່ງ ຂອງ ຊຸນ ຢັດເຊັນ. ສະຫາຍເວືອງເປັນຄົນມີຊີວິດຊີວາ, ເຄື່ອນໄຫວວ່ອງໄວ ກິລິຍາອ່ອນນ້ອຍ ແຕ່ຄຳເວົ້າເດັດດ່ຽວ ແລະ ເຂັ້ມງວດ ທັງເປັນຄົນທີ່ດຶງດູດຄວາມສົນໃຈຂອງນັກຮຽນໄດ້ຢ່າງງ່າຍດາຍ. ເພິ່ນບໍ່ມັກເວົ້າແບບລອຍໆ ແຕ່ຫາກຍາມໃດກໍມັກຈະນຳເອົາແນວຄິດຂອງຕົນໄປຕິດພັນກັບຊີວິດຕົວຈິງ ແລະ ກັບພາກປະຕິບັດ. ສະຫາຍມັກເວົ້າ ຊ້ຳແລ້ວຊ້ຳອີກວ່າ: ການປະຕິວັດແມ່ນພາລະກິດຂອງມວນຫມູ່ກຳມະກອນ ແລະ ຊາວນາ, ແຕ່ຫາກບໍ່ແມ່ນຂອງຄົນກຸ່ມໃດກຸ່ມຫນຶ່ງ. ຫນ້າທີ່ຕົ້ນຕໍຂອງພວກເຮົາແມ່ນຕ້ອງດຳເນີນວຽກງານ ຕົວຈິງຢ່າງລຽນຕິດ, ຢ່າງອົດທົນ ເພື່ອປຸກລະດົມມວນຫມູ່ມະຫາຊົນ". ຍາມໃດສະຫາຍ ກໍມີບັນດາຕົວເລກຂໍ້ມູນ ເພື່ອເປັນຫລັກຖານໃຫ້ແກ່ການພິສູດອັນໃດອັນຫນຶ່ງ. ສະຫາຍ ມັກແນະນຳຕັກເຕືອນພວກຂ້ອຍວ່າ "ຕ້ອງຄຳນຶງເປັນພິເສດເຖິງຄວາມຫມາຍຂອງຕົວເລກຂໍ້ມູນ. ອັນນັ້ນແມ່ນວັດຖຸພິຍານທີ່ຊີ້ໃຫ້ເຫັນຕົວຈິງຢ່າງຊັດເຈນ. ດັ່ງທີ່ເລນິນ ໄດ້ເວົ້າວ່າ: ພວກຊາວນາເຊື່ອຕົວເລກຫລາຍກວ່າທິດສະດີ. ເຖິງແມ່ນວ່າການຈື່ຈຳຕົວເລກຂໍ້ມູນເປັນເລື່ອງຍາກທີ່ສຸດກໍຕາມ ກໍຄວນເຮັດແນວນີ້". ສະຫາຍພະຍາຍາມເຝິກແອບໃຫ້ນັກຮຽນມີທິດສະນະແບບເລນິນກ່ຽວກັບການຮັບຮູ້ໂລກພາວະວິໄສ: "ຍາມໃດ ນັກປະຕິວັດກໍຕ້ອງຕິດຕາມສະຖານະການການເມືອງໃຫ້ທັນເວລາ. ຈົ່ງອ່ານຫນັງສືພິມ ຫລາຍ-ກວ່າເກົ່າ ເພາະວ່າຫນັງສືພິມບັນຈຸໄວ້ຊຶ່ງກະໂຕຊີວິດ, ແລະ ຈາກນັ້ນ ບັນດາສະຫາຍຈະຮູ້ສະພາບການໄດ້ຢ່າງດີທີ່ສຸດ".

ໃນຈຳນວນວິຊາທີ່ຮ່ຳຮຽນຢູ່ຊຸດຮຽນນັ້ນ ມີບັນຫາຫນຶ່ງທີ່ນັກສຶກສາຫວຽດນາມສົນໃຈຫລາຍທີ່ສຸດ ນັ້ນແມ່ນບັນຫາກ່ຽວກັບການປະຕິວັດຫວຽດນາມ, ໂດຍສະເພາະ ແມ່ນບັນຫາທີ່ວ່າ ການປະຕິວັດຫວຽດນາມຕ້ອງມີລັກສະນະໃດ, ກຳລັງສັງຄົມ- ການເມືອງ ແລະ ຊົນຊັ້ນໃນສັງຄົມອັນໃດທີ່ສາມາດເຂົ້າຮ່ວມຢ່າງຕັ້ງຫນ້າໃນການປະຕິວັດດັ່ງກ່າວ.

ພາຍຫລັງສົງຄາມໂລກຄັ້ງທີຫນຶ່ງ ການພົວພັນລະຫວ່າງພວກລ່າເມືອງຂຶ້ນຝະລັ່ງ

ກັບລາຊະວົງຈັກກະພັດຫວຽດນາມ ໄດ້ມີຫລາຍສີສັນແຕກຕ່າງກັນກັບໃນເມື່ອກ່ອນ. ໂດຍຫວາດຫວັ່ນ ຕໍ່ອຳນາດຂອງຝະລັ່ງ, ຈັກກະພັດ ຂ້າຍດົ໋ງ ແລະ ເສນາອາມາດຂອງພະອົງຈຶ່ງບໍ່ພຽງແຕ່ປະລະທ່າທີເຮັດຄືຄັດຄ້ານຕໍ່ພວກລ່າເມືອງຂຶ້ນຝະລັ່ງທີ່ເຄີຍມີໃນ ບັນດາລາຊະວົງອື່ນໆໃນເມື່ອກ່ອນ ແຕ່ຫາກຍັງກ້າວຂຶ້ນບົນເສັ້ນທາງ ແຫ່ງການຮ່ວມມື ຢ່າງແໜ້ນແຟ້ນ ແລະ ເປີດແປນກັບອຳນາດປົກຄອງຝະລັ່ງ. ການເດີນທາງອັນມະໂຫລານຂອງຂ້າຍດົ໋ງໄປຍັງປະເທດຝະລັ່ງໃນປີ ໑໙໔໓, ບົດປາໄສປະຈົບປະແຈງ, ທ່າທີອີງອັງມັງນໍຂອງພະອົງທີ່ກະທຳລົງໄປຢູ່ໃນການເດີນທາງດັ່ງນັ້ນ ໄດ້ເຮັດໃຫ້ປະຊາຊົນຫວຽດນາມຍິ່ງເພີ່ມຄວາມຄຽດແຄ້ນໂກດເຄືອງຕໍ່ພະອົງຂຶ້ນຕື່ມ.

ພວກລ່າເມືອງຂຶ້ນຝະລັ່ງໄດ້ເຮັດສຸດຄວາມສາມາດເພື່ອຟື້ນຟູອິດທິພົນທີ່ເຄີຍມີມາກ່ອນຂອງຈັກກະພັດຂ້າຍດົ໋ງ ເພາະເຫັນວ່ານາຍາດນັ້ນເປັນສິ່ງທີ່ຕອບສະໜອງຜົນປະໂຫຍດຂອງພວກເຂົາ. ດ້ວຍຈຸດປະສົງດັ່ງກ່າວ ພວກເຂົາໄດ້ເລືອກເອົາຄົນຫວຽດນາມຈຳນວນໜຶ່ງທີ່ໄດ້ຮຽນມາແຕ່ຝະລັ່ງ ແລ້ວຈັດຕັ້ງພັກການເມືອງພັກໜຶ່ງທີ່ນິຍົມລາຊາທິ–ປະໄຕ ທັງອອກໜັງສືພິມຂອງເຂົາເອງ. ດ້ວຍການຊ່ວຍເຫລືອຂອງຝາມກວິ້ງ ຕົວການຮ່ວມມືສຸດຂີດກັບຝະລັ່ງ ແລະ ຂອງພັກພວກດຽວກັນ, ເຈົ້າຊາຍວິງຫຸຍ ຊຶ່ງ ເປັນຄົນໜຶ່ງທີ່ໄດ້ຮັບການສຶກສາຈາກຕາເວັນຕົກກໍ່ໄດ້ຮວບຮວມບັນດາກຳລັງທີ່ເຜີຍແຜ່ ແນວຄິດນິຍົມລາຊາທິປະໄຕ, ຄຳພີຂອງລັດທິຂົງຈື້ ເຖິງຢ່າງໃດກໍ່ຕາມ ການຟື້ນຟູອຳນາດຂອງລາຊະບັນລັງທີ່ເສຍອິດທິພົນແລ້ວນັ້ນ ກໍ່ເປັນເລື່ອງທີ່ບໍ່ອາດເຮັດໄດ້. ສະນັ້ນຝາມຈູຈິງ ເມື່ອກັບຄືນປະເທດຈຶ່ງຊອກຊ່ອງທາງຮຽກຮ້ອງໃຫ້ມີການ "ປະຕິຮູບລາຊະບັນລັງຄືນໃໝ່, ບັນຫານີ້ເຮັດໃຫ້ຄວາມເຊື່ອຖືໜັ້ນຕໍ່ຝາມຈູຈິງລົດໜ້ອຍຖອຍລົງ ຢູ່ໃນເພື່ອນຮ່ວມຊາດຜູ້ຮັກຊາດ. ຕົກມາຮອດຕອນຕົ້ນຊຸມປີ ໔໐ ຢູ່ໃນໂຄງການການເມືອງຂອງບັນດາພັກຝ່າຍການເມືອງທັງໝົດ ແລະ ບັນດາກຸ່ມຄົນຮັກຊາດ ທີ່ຄົງຕົວຢູ່ຫວຽດນາມໜ້າທີ່ດັບສູນ ແອກຄອບຄອງຂອງລ່າເມືອງຂຶ້ນ ຕິດພັນກັບການໂຄ່ນລົ້ມ ລາດຊະວົງ ຂອງຈັກກະພັດ.

ຄຽງຄູ່ກັບລາດຊະວົງຂອງຈັກກະພັດນັ້ນ ຈິນຈຸ້ນສັກດີນາ ຊຶ່ງເປັນບ່ອນອີງໃຫ້ແກ່ລາດຊະວົງນັ້ນ ກໍ່ໄດ້ຮັບການປ່ຽນແປງຢ່າງເຖິງກົກເຖິງຮາກເຊັ່ນດຽວກັນ. ໃນຫລາຍສິບປີແຫ່ງການປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງ, ໂດຍສະເພາະຢູ່ໃນໄລຍະ ສົງຄາມໂລກຄັ້ງທີໜຶ່ງນັ້ນ, ຢູ່ໃນຈິນຈຸ້ນສັກດີນາຫວຽດນາມໄດ້ເກີດມີກຸ່ມເສດຖີທີ່ດິນ ແບບ

ໃໝ່ທີ່ມີຈຳນວນຫລວງຫລາຍເພີ່ມຂຶ້ນຕື່ມ. ຖ້າຢູ່ນະຄອນຫລວງ, ເຈົ້າຊີວິດ ແລະ ລາດຊະສຳນັກຂາຍຊາດຂອງພະອົງແມ່ນບ່ອນອີງໃຫ້ແກ່ພວກລ່າເມືອງຂຶ້ນຝະລັ່ງ, ສ່ວນຢູ່ຊົນນະບົດບ່ອນອີງດັ່ງກ່າວແມ່ນພວກເຈົ້າທີ່ດິນປະຕິການ. ຢູ່ເຂດຊົນນະບົດ ໂດຍສະເພາະຢູ່ນາມກໍ່ ການຕໍ່ສູ້ຂອງທົ່ວປວງຊົນຕ້ານພວກຣຸກຣານຕ່າງປະເທດຍັງນັບວັນມີສີສັນສັງຄົມຢ່າງຈະແຈ້ງ ແລະ ກາຍເປັນການຕໍ່ສູ້ຂອງຊາວນາທຸກທີ່ຕ້ານການຂົ່ມເຫັງ ຂອງພວກເຈົ້າທີ່ດິນ ຊຶ່ງເປັນຕົວແທນໃຫ້ແກ່ລະບອບເມືອງຂຶ້ນ. ຕົກມາຮອດຕອນຕົ້ນຊຸມປີ ໔໐ບັນດານັກປະຕິວັດຫວຽດນາມບໍ່ສົງໄສອີກແລ້ວ ຢູ່ໃນປະເທດຫວຽດນາມ ຊົນຊັ້ນສັກດີນາສ່ວນໃຫຍ່ໄດ້ກາຍເປັນໄມ້ມີທີ່ບອກໄດ້ໃຊ້ຟັງ ທີ່ຈົງຮັກພັກດີຕໍ່ພວກລ່າເມືອງຂຶ້ນ.

ດັ່ງນັ້ນ ຫລັກມູນຂອງເລນິນທີ່ວ່າ ການປະຕິວັດປົດປ່ອຍຊາດຕ້ອງມີທ່າອຽງຕ້ານພວກສັກດີນາຢ່າງເດັດຂາດ ແລະ ຈະຕ້ອງມີຊາວນາເປັນກຳລັງແຮງອັນເຂັ້ມແຂງຂອງການປະຕິວັດນັ້ນ ແມ່ນຫລັກມູນທີ່ແທດເໝາະກັບສະພາບຕົວຈິງຂອງປະເທດຫວຽດນາມເວລານັ້ນແລະຮຽກຮ້ອງໃຫ້ຫງວຽນອາຍກວັກ ແລະ ເພື່ອນຮ່ວມຣົບຂອງເພິ່ນ ເຂົ້າໃຈແຈ້ງທີ່ສຸດຕໍ່ບັນຫານີ້. ຄຳຂວັນທີ່ວ່າ: "ຈົ່ງມອບທີ່ດິນທັງໝົດໃຫ້ຜູ້ເຮັດໄຮ່ໄຖນາ" ທີ່ເກີດມາຈາກຄວາມຈຳເປັນພາວະວິໄສ ຈຶ່ງກາຍເປັນການເລັ່ງທວງອັນພື້ນຖານໃນໂຄງການການເມືອງຂອງພວກເຂົາເຈົ້າ. ມີກຳລັງສັງຄົມອັນໃດແດ່ ທີ່ອາດສາມາດ ຍົກຄຳຂວັນແບບນີ້ຂຶ້ນ ແລະ ເຮັດໃຫ້ມັນປະກົດເປັນຈິງ,ທີ່ອາດສາມາດປຸກລະດົມຊາວນາເປັນລ້ານໆຄົນຢູ່ຊົນນະບົດໃຫ້ລຸກໂຈມຕີລັດທິລ່າເມືອງຂຶ້ນ ແລະ ລະບອບສັກດີນາ? ຫງວຽນອາຍກວັກ ຕອບບັນດາຄຳຖາມເຫລົ່ານີ້ຢ່າງຈະແຈ້ງຢູ່ໃນບົດສອນຂອງເພິ່ນວ່າ: ຢູ່ໃນບັນດາຊົນຊັ້ນທັງໝົດ ຈະມີແຕ່ຊົນຊັ້ນກຳມາຊີບເທົ່ານັ້ນ ຈຶ່ງຈະປະຕິບັດວຽກງານ ດັ່ງກ່າວ ເພາະວ່າກະໂຕຊົນຊັ້ນກຳມາຊີບເອງ ແມ່ນນັກຮົບຕ້ານລັດທິລ່າເມືອງຂຶ້ນ ຢ່າງເດັດດ່ຽວ, ແມ່ນຕົວແທນອັນແທ້ຈິງໃຫ້ແກ່ຜົນປະໂຫຍດຂອງທົ່ວປວງຊົນ. ຊົນຊັ້ນນາຍທຶນບໍ່ສາມາດຈະປະຕິບັດຄຳຂວັນປະຕິວັດດັ່ງກ່າວໃຫ້ປະກົດເປັນຈິງໄດ້ ຍ້ອນວ່າຜົນປະໂຫຍດຂອງມັນປົນເປເຂົ້າກັນກັບຜົນປະໂຫຍດຂອງພວກເຈົ້າທີ່ດິນນັບມື້ນັບຫລາຍຂຶ້ນກວ່າເກົ່າ. ຢູ່ນາມກໍ່ ພວກເຈົ້າທີ່ດິນກຳລັງກາຍເປັນນາຍທຶນ. ກົງກັນຂ້າມ, ຢູ່ບັກກໍ່ ພວກນາຍທຶນຊ້ຳພັດຊື້ເອົາທີ່ດິນ ແລະ ກາຍເປັນເຈົ້າທີ່ດິນ.

ຫງວຽນອາຍກວັກ ແລະ ບັນດາເພື່ອນມິດໃໝ່ຂອງເພິ່ນ ໃນສະມາຄົມ "ເຕີນເຕີນສາ" ລ້ວນແຕ່ເປັນເອກະສັນກັນວ່າ ຊົນຊັ້ນກຳມາຊີບຫວຽດນາມຈຳເປັນຕ້ອງມີພັກ

ຊຶ່ງເປັນກອງລະວັງໜ້າດ້ານການເມືອງຂອງຕົນໄວເທົ່າໃດຍິ່ງເປັນການດີ. ໂດຍແຕກຕ່າງກັບບັນດາເພື່ອນມິດຂອງເພິ່ນນັ້ນ ຫງວຽນອາຍກວັກ ຮູ້ຄຳເຕືອນຂອງເລນິນດີກ່ຽວກັບໄພອັນຕະລາຍທີ່ອາດເກີດຂຶ້ນຈາກການຮີບຮ້ອນສ້າງຕັ້ງພັກກອມມູນິດ ໂດຍສະເພາະຢູ່ໃນບັນດາປະເທດຕາເວັນອອກທີ່ຫລ້າຫລັງຕັ້ງເປັນສະຕະວັດ. ຄວາມຕ້ອງການພາວະວິໄສໃນການສ້າງຕັ້ງພັກຂອງຊົນຊັ້ນກຳມະກອນຢູ່ອິນດູຈີນ ໄດ້ເກີດຂຶ້ນມາແລ້ວ ສ່ວນວ່າເງື່ອນໄຂອັດຕະວິໄສເພື່ອສ້າງຕັ້ງພັກຍັງບໍ່ສຸກງອມ. ຈຳເປັນຕ້ອງມີອົງການຈັດຕັ້ງໜຶ່ງທີ່ອາດມີບົດບາດເປັນອົງການຢູ່ລະຫວ່າງກາງ ບົນເສັ້ນທາງໄປສູ່ການສ້າງຕັ້ງພັກກອມມູນິດໃນອະນາຄົດ.

ເມື່ອມາຮອດກວາງເຈົາ ຫງວຽນອາຍກວັກ ຮູ້ວ່າ ຟານໂບ້ຍເຈົາ ໄດ້ສ້າງຕັ້ງ "ພັກຄະນະຊາດຫວຽດນາມ" ຂຶ້ນໃນເດືອນມິຖຸນາປີ ໑໙໒໔ ຍ້ອນໄດ້ຮັບພົນສະທ້ອນທາງແນວຄິດຂອງ ຊຸນ ຢັດເຊັນ; ພັກນີ້ປະກອບດ້ວຍຊາວຫວຽດນາມທີ່ລີ້ໄພການເມືອງໄປຢູ່ປະເທດຈີນ. ໂຄງການການເມືອງຂອງພັກໄດ້ຕຳໜິລັດທິລ່າເມືອງຂຶ້ນຟະລັ່ງຢ່າງຮຸນແຮງ ແລະ ຍັງໄດ້ເລັ່ງທວງໃຫ້ຫວຽດນາມມີສິດໃນການຕັດສິນດ້ວຍຕົນເອງ, ສິດສະເໝີພາບ, ກໍ່ສ້າງສາທາລະນະລັດທີ່ມີລັດຖະທຳມະນູນ, ປ່ອຍນັກໂທດການເມືອງທັງໝົດ, ໃຫ້ນັກຮຽນຫວຽດນາມມີສິດໄປຮຽນຢູ່ຕ່າງປະເທດ, ໃຫ້ບັນດາພັກຝ່າຍການເມືອງມີສິດເຄື່ອນໄຫວຢ່າງອິດສະຫລະ, ມີສິດອິດສະຫລະພາບໃນການປະດິດສ້າງ. ພາຍຫລັງຊອກຮູ້ການເຄື່ອນໄຫວຂອງພັກ, ຢູ່ໃນບົດລາຍງານຕໍ່ຄະນະບໍລິຫານງານ ສາກົນກອມມູນິດ, ຫງວຽນອາຍກວັກໄດ້ຕີລາຄາສູງນ້ຳໃຈຮັກຊາດ ຂອງອົງການຈັດຕັ້ງນີ້, ແຕ່ຂະນະດຽວກັນ ເພິ່ນຍັງໄດ້ຊີ້ໃຫ້ເຫັນຈຸດອ່ອນຂອງບັນດາຜູ້ນຳພັກ. ຕາມຄວາມເວົ້າ ຂອງຫງວຽນອາຍກວັກ ແມ່ນວ່າພວກເຂົາ "ບໍ່ຮູ້ເລື່ອງການເມືອງຢູ່ແລ້ວແລະ ຊ້ຳບໍ່ໜຳຍັງບໍ່ຊຳນານທາງການຈັດຕັ້ງມະຫາຊົນຈັກດີ".

ຫງວຽນອາຍກວັກໄດ້ມີໂອກາດພົບກັບຟານໂບ້ຍເຈົາຫລາຍຄັ້ງ, ບາງເທື່ອ ຢູ່ກວາງເຈົາ, ບາງເທື່ອຢູ່ຊຽງໄຮ້. ໃນນາມເປັນຜູ້ຕາງໜ້າສາກົນກອມມູນິດ, ຫງວຽນອາຍກວັກ ຊັກຊວນໃຫ້ຟານໂບ້ຍເຈົາ ສຳຫລວດຄືນໂຄງການການເມືອງ ແລະ ຍຸດໂທບາຍເຄື່ອນໄຫວຂອງພັກຄະນະຊາດຫວຽດນາມ ເພື່ອຈຸດປະສົງເຮັດໃຫ້ພັກດັ່ງກ່າວມີລັກສະນະປະຕິວັດໃນຂັ້ນຕໍ່ໄປ. ເຖິງແມ່ນວ່າການໂອ້ລົມກັນຈະບໍ່ມີໝາກຜົນໃນທັນທີທັນໃດໂລດກໍຕາມ, ແຕ່ໃນທີ່ສຸດກໍໃຫ້ຜົນຕາມທີ່ຫວັງໄວ້. ພວກເຂົາເຈົ້າໄດ້ໄປຮອດບ່ອນ ຕຶກ

ລົງຊື່ຂາດວ່າ ລະດູຮ້ອນປີ ໑໙໒໕ ນີ້ ຈະຈັດຕັ້ງກອງປະຊຸມ ຂອງແກ່ນສານຊີ້ນຳພັກ ກອງປະຊຸມຄັ້ງນີ້ຈະເປັນຜູ້ຕັດສິນຊາຕາກຳໃນພາຍໜ້າຂອງພັກຄະນະຊາດ. ແຕ່ວ່າ , ການຕົກລົງດັ່ງກ່າວປະຕິບັດບໍ່ໄດ້. ວັນທີ ໑໘ ເດືອນພຶດສະພາປີ ໑໙໒໕, ຟານໂບ້ຍເຈົາ ຖືກພວກນັກສືບຝະລັ່ງຈັບໄດ້ຢູ່ຊຽງໄຮ້, ແລ້ວກໍສົ່ງໄປຫວຽດນາມ ແລະ ກັກຂັງໄວ້ໃນຄຸກຮ່າໂນ້ຍ.

ໃນຕອນທ້າຍເດືອນມິຖຸນາ ປີ ໑໙໒໕, ຫຼັງຈາກເລີກຮຽນແລ້ວ, ຫງວຽນພ້ອມດ້ວຍເພື່ອນມິດຜູ້ໜຸ່ມນ້ອຍຂອງເພິ່ນໄດ້ປະຊຸມກັນຢູ່ຊັ້ນສູດຂອງຕຶກຫຼັງໜຶ່ງ ທີ່ຕັ້ງຢູ່ຖະໜົນວັນມິນລຸ. ພວກເຂົາເຈົ້າໄດ້ຕັດສິນໃຈຈະສ້າງຕັ້ງອົງການຈັດຕັ້ງຮັກຊາດ ແບບໃໝ່ອັນ ໂດຍໃຫ້ຊື່ວ່າ: "ສະມາຄົມຊາວໜຸ່ມປະຕິວັດ ຫວຽດນາມ". ໃນກອງປະຊຸມເທື່ອນີ້, ຫງວຽນອາຍກວັກໄດ້ຍົກໜ້າທີ່ຂອງອົງການຈັດຕັ້ງດັ່ງຕໍ່ໄປນີ້ອັນຕໍ່ທີ່ປະຊຸມວ່າ:

" ສິ່ງທີ່ສຳຄັນສຳລັບພວກເຮົາໃນປະຈຸບັນນີ້ ແມ່ນການໂຄສະນາທາງເລິກທາງກວ້າງກ່ຽວກັບບັນດາຫຼັກມູນຂອງທິດສະດີເລນິນ, ບັນດາມະຕິ ແລະ ຄຳຊີ້ນຳຂອງສາກົນກອມມູນິດ ຢູ່ໃນບັນດານັກປະຕິວັດຫວຽດນາມ. ພວກເຮົາຕ້ອງຈົດຈຳວ່າ ລັດທິເລນິນເປັນອາວຸດຊຶ່ງບໍ່ມີຫຍັງມາປ່ຽນແທນໄດ້. ຫຼັງຈາກທີ່ສະມາຄົມເຕົ້າໂຮມນັກຮັກຊາດທີ່ແທ້ຈິງຫຼາຍຄົນເຂົ້າກັນ ບົນພື້ນຖານຫຼັກໝັ້ນປະຕິວັດແລ້ວນັ້ນ, ສະມາຄົມ ຂອງພວກເຮົາຈະຕ້ອງກາຍເປັນຂົວຕໍ່ ເພື່ອກ້າວໄປເຖິງການສ້າງຕັ້ງພັກກອມມູນິດອັນ ໃນອະນາຄົດ ເມື່ອເງື່ອນໄຂອຳນວຍໃຫ້. ເພື່ອຢາກເຮັດວຽກດັ່ງກ່າວ, ຂ້າພະເຈົ້າສະເໜີຈັດຕັ້ງໜ່ວຍກອມມູນິດອັນໃນສະມາຄົມ. ໜ່ວຍນີ້ຕ້ອງເຄື່ອນໄຫວປິດລັບໃນຂອບເຂດຂອງສະມາຄົມ. ແນ່ນອນວ່າ ອຳນາດປົກຄອງທ້ອງຖິ່ນ ໂດຍສະເພາະແມ່ນພວກນັກສືບສອດແນມຝະລັ່ງຈະສົນໃຈນຳລັກສະນະຂອງສະມາຄົມ, ສະນັ້ນ ເພື່ອຮັກສາຄວາມລັບ ຂ້າພະເຈົ້າສະເໜີວ່າໃນໜັງສືພິມເປີດເຜີຍ ພວກເຮົາຄວນໃສ່ຊື່ພັກຊາວໜຸ່ມຫວຽດນາມ ຊຶ່ງເປັນຊື່ທີ່ບໍ່ຮຸນແຮງປານໃດ".

ຢູ່ກອງປະຊຸມເທື່ອນີ້ຍັງໄດ້ຜ່ານມະຕິຈັດພິມໜັງສືພິມ "ຊາວໜຸ່ມ" ເພື່ອໃຫ້ເປັນກະບອກສຽງຂອງສະມາຄົມ. ເຊັ່ນກັນກັບຢູ່ປາຣີເມື່ອກ່ອນນີ້, ຫງວຽນອາຍກວັກແບກຫາບໜ້າທີ່ຕົ້ນຕໍກ່ຽວກັບການຈັດທຳໜັງສືພິມ. ໜັງສືພິມແມ່ນພິມ ແບບປະຖົມປະຖານ, ມີຈຳນວນພິມປະມານສອງສາມຮ້ອຍສະບັບ, ຈຳໜ່າຍ ໃນໝູ່ຄົນຫວຽດນາມຕ່າງດ້າວທີ່ອາໄສຢູ່ພາກໃຕ້ຈີນ. ຜ່ານມີລູກເຮືອຢູ່ປະຈຳກຳປັ່ນຝະລັ່ງທີ່ໄດ້ມາແວ່ ຢູ່

ກວ້າງເຈົ້າ ແລະ ຊຸຮຸງໄຮເລື້ອຍໆ, ໜັງສືພິມຖືກນຳເຂົ້າຫວຽດນາມຢ່າງລັບໆ, ແລ້ວ ສົ່ງຕໍ່ໄປປະເທດສະຫຍາມ ແລະ ຝະລັ່ງ ຊຶ່ງເປັນບ່ອນທີ່ມີຄົນຫວຽດນາມຕ່າງດ້າວ ອາໄສຢູ່ຢ່າງຫລວງຫລາຍ. ຄວາມຮຽກຮ້ອງຢ່າງສຸດຈິດສຸດໃຈເພື່ອຕໍ່ສູ້ປົດປ່ອຍຊາດ, ປົດປ່ອຍສັງຄົມກໍເຊັ່ນດຽວກັບການເປີດແປໂທດກຳຂອງພວກລ່າເມືອງຂຶ້ນ ແລະ ພວກລູກມືຂອງເຂົາ ທີ່ຖືກພິມອອກໃນໜ້າໜັງສືພິມ ເປັນສິ່ງທີ່ຊ່ວຍໃຫ້ໜັງສືພິມໄດ້ຮັບຄວາມນິຍົມຢ່າງກວ້າງຂວາງຢູ່ໃນໝູ່ຄົນທີ່ກ້າວໜ້າຢູ່ຫວຽດນາມ. ທາງອຳນາດການປົກຄອງເມືອງຂຶ້ນຂອງຝະລັ່ງ ໄດ້ຍອມຮັບຄວາມຈິງທີ່ວ່າໜັງສືພິມໄດ້ຮັບຄວາມນິຍົມຢ່າງຫລວງຫລາຍ. ໃນບົດລາຍງານບົດໜຶ່ງ ທີ່ສົ່ງໄປໃຫ້ຂ້າຫລວງຝະລັ່ງຢູ່ອິນດູຈີນ ມີຕອນໜຶ່ງວ່າ: "ໜັງສືພິມຊຶ່ງຫງວຽນອາຍກວັກເປັນຜູ້ກໍ່ຕັ້ງຂຶ້ນນັ້ນບໍ່ພຽງແຕ່ມີຄົນໄດ້ອ່ານຢູ່ຫວຽດນາມເທົ່ານັ້ນ ແຕ່ຫາກຍັງໄດ້ອ່ານຢູ່ຕ່າງປະເທດອີກດ້ວຍ".

ໜັງສືພິມສະບັບທີ ຜ໑ ເຮັດໃຫ້ພວກນັກສືບສອດແນມລ່າເມືອງຂຶ້ນສະທ້ານຢ້ານກົວທີ່ສຸດ. ໜັງສືພິມ ພິມດ້ວຍຕົວເປັງຕົ້ນໜ້າວ່າ "ມີແຕ່ພັກກອມມູນິດເທົ່ານັ້ນຈຶ່ງສາມາດນຳເອົາອິດສະຫລະພາບ, ຄວາມຜາສຸກໃຫ້ປະຊາຊົນຫວຽດນາມໄດ້". ຄວາມເວົ້າດັ່ງກ່າວຂອງບັນດາສະມາຊິກສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ແລະ ຂອງ ຜູ້ນຳແນວຄິດຂອງສະມາຄົມ ໄດ້ສະແດງໃຫ້ເຫັນບໍ່ພຽງແຕ່ຫລັກໝັ້ນດ້ານການເມືອງເທົ່ານັ້ນ ແຕ່ຫາກນັບທັງຄວາມໜັກແໜ້ນແບບກອມມູນິດຂອງພວກເຂົາອີກດ້ວຍ. ກ່ອນອື່ນໝົດ, ພວກເຂົາເຈົ້າຢາກເວົ້າວ່າ ຂະບວນການປົດປ່ອຍຊາດຫວຽດນາມກຳລັງຢືນຢູ່ປາກປະຕູແຫ່ງໄລຍະໃໝ່ດ້ານລູມນະພາບ, ການສ້າງຕັ້ງກອງລະວັງໜ້າປະຕິວັດອັນແທ້ຈິງ ຂຶ້ນຢ່າງຮີບດ່ວນ ເຊິ່ງໄດ້ແກ່ພັກກອມມູນິດນັ້ນ ແມ່ນຄວາມຮຽກຮ້ອງຕ້ອງການ ພາວະວິໄສອັນເປັນຕາຍຂອງສະພາບການທາງດ້ານການເມືອງ, ມີແຕ່ພັກນີ້ເທົ່ານັ້ນ ຈຶ່ງຈະມີຄວາມສາມາດເຮັດໃຫ້ຂະບວນການປົດປ່ອຍຫລຸດພົ້ນອອກຈາກເສັ້ນທາງແຄບແຫ່ງຄວາມປະລາໄຊ ແລະ ເດີນໄປສູ່ເສັ້ນທາງກວ້າງສຸດສາຍຕາແຫ່ງໄຊຊະນະ.

ສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ບໍ່ໄດ້ສັງກັດຢູ່ໃນສາກົນກອມມູນິດ ຢ່າງເປັນທາງການ, ແຕ່ໃນການເຄື່ອນໄຫວທາງພາກປະຕິບັດຂອງມັນ ສະມາຄົມ ປະຕິບັດຕາມມະຕິຄຳສັ່ງຂອງສາກົນກອມມູນິດ ແລະ ໄດ້ຕິດຕໍ່ພົວພັນກັບພັກກອມມູນິດຂອງບັນດາປະເທດອື່ນຢ່າງສະໜິດແໜ້ນ, ກ່ອນອື່ນໝົດກັບພັກກອມມູນິດຂອງປະເທດລັດເຊຍໂຊວຽດ, ຝະລັ່ງ, ຈີນ. ໃນຕົວຈິງ ມັນຖືກຕ້ອງຕາມທີ່ ຫງວຽນອາຍກວັກໄດ້ຄາດຄະເນ

ໄວ້ດີ ສະມາຄົມ ກາຍມາເປັນໜໍ່ແໜງຂອງພັກກອມມູນິດໃນພາຍຫລັງ.

ໃນສະມາຄົມດີກັນກັບຢູ່ໃນພັກອັນແທ້ຈິງພັກໜຶ່ງ, ມີລະບົບອັນເຂັ້ມງວດໃນການຄັດເລືອກ ແລະ ກໍ່ສ້າງພະນັກງານປະຕິວັດ ເຊິ່ງ ຫງວຽນອາຍກວັກເປັນຜູ້ວາງອອກ. ບຸກຄົນທີ່ຖືກຮັບເຂົ້າຢູ່ໃນສະມາຄົມສ່ວນໃຫຍ່ເປັນບຸກຄົນທີ່ຮຽນຈົບ ຊຸດຮຽນການເມືອງຢ່າງມີຜົນສຳເລັດ. ບຸກຄົນທີ່ຖືກຮັບເຂົ້າເປັນສະມາຊິກສະມາຄົມ ຕ້ອງປະຕິຍານຕົນຢູ່ຕໍ່ໜ້າຫລຸມຝັງສົບຂອງຟາມຮົງຖາຍ ວ່າຈະຈົງຮັກພັກດີຕໍ່ອຸດົມຄະຕິປະຕິວັດ. ຜູ້ທີ່ຮຽນຈົບຊຸດຮຽນການເມືອງສ່ວນໃຫຍ່ແມ່ນໄດ້ຖືກສົ່ງກັບປະເທດ ເພື່ອເຄື່ອນໄຫວໃຕ້ດິນ ຢູ່ຕາມທ້ອງຖິ່ນຕ່າງໆ. ພາຍຫລັງການປະຕິວັດເດືອນສິງຫາສຳເລັດແລ້ວ, ພວກເຂົາເຈົ້າຍັງຈົດຈຳໄດ້ດີກ່ຽວກັບຄຳຕັກເຕືອນທີ່"ສະຫາຍເວືອງ" ໄດ້ໃຫ້ພວກເຂົາເຈົ້າໄວ້ ຢ່າງລະອຽດ ແລະ ສຸດຈິດສຸດໃຈກ່ອນທີ່ພວກເຂົາເຈົ້າຈະກັບຄືນປະເທດ :

"ພວກສະຫາຍຈົ່ງຊອກພົບເພື່ອນຄົນເກົ່າທີ່ໄວ້ເນື້ອເຊື່ອໃຈໄດ້, ບຸກຄົນທີ່ ເປັນໃຈນຳພາລະກິດກູ້ຊາດຂອງພວກເຮົາ. ບໍ່ວ່າຈະເວົ້າເລື່ອງຫຍັງກໍຕາມ ຈົ່ງພະຍາຍາມດຶງບັນຫາເຂົ້າໃສ່ການກ່າວປະນາມການກົດຂີ່ຢ່າງໂຫດຮ້າຍຂອງພວກຕາເວັນຕົກຢູ່ ປະເທດເຮົາ. ຖ້າຄຳເວົ້າຂອງພວກສະຫາຍໄດ້ຮັບຜົນ ພວກສະຫາຍກໍ່ຕ້ອງຕັ້ງຄຳຖາມກັບທີ່ໂລດວ່າ ຊາວຫວຽດນາມພວກເຮົາຍັງຈະຍອມແບກແອກລອບລອງ ແລະ ການຢຽບ-ຢ່ຳກຽດສັກສີຈາກຄົນຕ່າງດ້າວໄປຮອດມື້ໃດອີກ? ຖ້າພວກເຂົາເຈົ້າຖາມວ່າຈະເອົາກຳລັງຢູ່ໃສເພື່ອຂັບໄລ່ພວກຕາເວັນຕົກ,ພວກສະຫາຍຈົ່ງອະທິບາຍໃຫ້ພວກເຂົາເຈົ້າຟັງວ່າກຳລັງແຮງຂອງພວກເຮົາແມ່ນນອນຢູ່ໃນຄວາມສາມັກຄີ ແລະ ຄວາມເປັນປຶກແຜ່ນ. ຖ້າພວກເຮົາໝົດທຸກຄົນລຸກຮື້ອນຮ່ວມກັນ ອາວຸດຂອງສັດຕູກໍຈະກາຍມາເປັນອາວຸດ ຂອງພວກເຮົາ".

ໃນເດືອນກໍລະກົດປີ ໑໙໒໕, ຢູ່ໃນຈົດໝາຍທີ່ສົ່ງໄປຫາຄະນະປະທານສາກົນ-ກອມມູນິດ, ຫງວຽນອາຍກວັກ ຂຽນວ່າ: "ນັບແຕ່ບາງວຽກທີ່ຂ້າພະເຈົ້າໄດ້ເຮັດ ນັບແຕ່ມື້ນັ້ນມາຮອດມື້:

໑) ຈັດຕັ້ງຈຸເຄື່ອນໄຫວໃຕ້ດິນໄດ້ໜຶ່ງຈຸ.

໒) ຈັດຕັ້ງສະມາຄົມຊາວນາ (ປະກອບດ້ວຍຊາວຫວຽດນາມຕ່າງດ້າວຢູ່ ປະເທດສະຫຍາມ).

໓) ຈັດຕັ້ງຈຸເຍົາວະຊົນໄດ້ໜຶ່ງຈຸ ຊຶ່ງແມ່ນລູກຊາວນາ ແລະ ກຳມະກອນ.ປະ

ຈູບັນບັນດາຫລານນ້ອຍເຫລົ່ານັ້ນຢູ່ກວາງເຈົາ ແລະ ພວກຂ້າພະເຈົ້າຊອກວິທີໃຫ້ພວກຫລານໄດ້ເຂົ້າຮຽນ(ຢູ່ຊຸດຮຽນການເມືອງ, ສະຫາຍຫວອຽນໄດ້ສອນສະເພາະຈູໜຶ່ງມີ ໗ ຄົນ, ມີເດັກນ້ອຍຫວຽດນາມທັງຍິງ ແລະ ຊາຍ. ພໍແຕ່ເລີ້ມໃນມື້ທຳອິດ ເພື່ອຮັກສາຄວາມລັບ ເພິ່ນໄດ້ຕັ້ງຊື່ໃໝ່ໃຫ້ພວກຫລານນ້ອຍ ແລະ ໃຊ້ນາມສະກຸນດຽວກັນ ວ່າ ຫລີ, ນັບແຕ່ນັ້ນມາ ພວກຫລານນ້ອຍເຫລົ່ານັ້ນຖືວ່າເປັນ "ຫລານ" ຂອງ ຫລີ ຊຸຍ-ຜູ້ ຂຽນ):

໔) ຈັດຕັ້ງ ຈູແມ່ຍິງປະຕິວັດໄດ້ໜຶ່ງຈູ (໑໐ ຄົນ);

໕) ຈັດຕັ້ງໂຮງຮຽນ ໂຄສະນາການເມືອງໄດ້ໜຶ່ງຫລັງ. ຜູ້ເຂົ້າຮ່ວມໄດ້ເຂົ້າມາກວາງເຈົາຢ່າງປິດລັບ. ພາຍຫລັງຮ່ຳຮຽນໄດ້ໜຶ່ງເດືອນເຄິ່ງ, ພວກເຂົາເຈົ້າໄດ້ກັບຄືນປະເທດ. ນັກຮຽນທີ່ຈົບຊຸດຮຽນທີໜຶ່ງມີ ໑໐ ຄົນ. ນັກຮຽນທີ່ຈົບຊຸດຮຽນຕໍ່ມາໃນເດືອນກໍລະກົດ ມີປະມານ ໒໐ ຄົນ ".

ຜູ້ທີ່ຮ່ຳຮຽນການເມືອງຢູ່ກວາງເຈົາ ແລະ ເປັນຜູ້ທີ່ໄດ້ເຄື່ອນໄຫວຢູ່ໃນຖັນແຖວຂອງສະມາຄົມຊາວໜຸ່ມ ປະຕິວັດ ຫວຽດນາມ ແລະ ໃນກອງບັນນາທິການໜັງສືພິມ "**ຊາວ**ໜຸ່ມ" ນັ້ນລ້ວນແຕ່ໄດ້ຜ່ານໂຮງຮຽນຕໍ່ສູ້ປະຕິວັດມາເປັນຢ່າງດີ ອາດເວົ້າໄດ້ວ່າໄດ້ຜ່ານໂຮງຮຽນໂຮ່ຈີມິນ ເຊິ່ງໃນນັ້ນບັນດາຫລັກການອັນເປັນພື້ນຖານຂອງລັດທິເລນິນຖືກນຳໃຊ້ເຂົ້າກັບສະພາບຕົວຈິງຂອງຫວຽດນາມຢ່າງມີຫົວຄິດປະດິດສ້າງ ແລະ ຢ່າງກາຍອິນຊີ. ສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ແລະ ໜັງສືພິມ "ຊາວໜຸ່ມ"ໄດ້ອົບຮົມສຶກສາບັນດານັກປະຕິວັດອາຊີບຈຳນວນຫລວງຫລາຍທີ່ອຸທິດຊີວິດໃຫ້ແກ່ການຕໍ່ສູ້ເພື່ອປົດປ່ອຍຊາດ ແລະ ປົດປ່ອຍສັງຄົມ ຂອງປະຊາຊົນຫວຽດນາມ. ໃນຈຳນວນນັ້ນມີບັນດາຜູ້ນຳຂອງພັກກອມມູນິດຫວຽດນາມ ແລະ ສາທາລະນະລັດສັງຄົມນິຍົມຫວຽດນາມເຊັ່ນ ໂຕນດຶກທັງ, ເລຍ່ວນ, ເຈືອງຈິງ, ຟາມວັນດົງ, ຮ່ວາງກັວກຫວຽດ, ບັນດານັກເຄື່ອນໄຫວມີຊື່ສຽງຂອງພັກໄດ້ອຸທິດຊີວິດຕົນໃຫ້ແກ່ໄຊຊະນະຂອງພາລະກິດ ຂອງພັກເຊັ່ນ ເລຮົ່ງຟອງ, ຫງວຽນທິມິງຄາຍ, ໂຮ່ຕຸງເມົາ, ເລຮົ່ງເຊິນ, ໂງຊາຕື, ຮ່າຮຸຽເຕີຍ, ຫງວຽນວັນຕາວ, ຍັງມີຊາວໜຸ່ມກອມມູນິດຄົນທຳອິດ ລີຕ໋ຈອງ ແລະ ສະຫາຍອື່ນໆອີກຈຳນວນຫລາຍ.

໙

ໂດຍເປັນນັກສາກົນນິຍົມຜູ້ສະເໜີຕົ້ນສະເໜີປາຍ ເວລາຢູ່ກວາງເຈົາຫວງຽນອາຍກວັກ ພະຍາຍາມຕິດຕໍ່ຢ່າງໃກ້ຊິດກັບບັນດານັກປະຕິວັດຈາກປະເທດຕ່າງໆ. ໂດຍໄດ້ຮັບການສະໜັບສະໜູນຂອງລຽວຈອງຄາຍ ຊຶ່ງເປັນຄົນໜຶ່ງທີ່ມີຄວາມສຳພັນ ສະໜິດແໜ້ນກັບເພິ່ນ, ຫວງຽນອາຍກວັກ ຈັດຕັ້ງ "ສະຫະພັນປະຊາຊາດອາຊີທີ່ ຖືກກົດຂີ່". ສະມາຊິກຂອງສະຫະພັນແມ່ນບັນດານັກຮັກຊາດອິນດູຈີນ, ບັນດາຜູ້ຕາງໜ້າ ທີ່ນ້ຳໃຈປະຕິວັດຂອງເກົາຫລີ, ມາເລເຊຍ, ອິນໂດເນເຊຍ, ອິນເດຍ ທີ່ໄດ້ມາລີ້ໄພຢູ່ສາທາລະນະລັດກວາງເຈົາ, ບັນດານັກປະຊາທິປະໄຕຜູ້ມີຊື່ສຽງຂອງຈີນ, ໃນນັ້ນລຽວຈອງຄາຍ ຖືກເລືອກເປັນປະທານສະຫະພັນ.

ແຕ່ລຽວຈອງຄາຍກໍ່ມີຊີວິດຢູ່ໄດ້ບໍ່ດົນ.

ວັນທີ ໒໐ ເດືອນສິງຫາ ປີ ໑໙໒໕, ຢູ່ຕໍ່ໜ້າຕຶກຂອງຄະນະບໍລິຫານງານ ພັກກົກມິນຕັງ ລຽວຈອງຄາຍ ຖືກຄາດຕະກອນຮັບຈ້າງຍິງບາດເຈັບໜັກ ຕໍ່ມາເພິ່ນກໍ່ເສຍຊີວິດ. ເພິ່ນຕໍ່ສູ້ຢ່າງຕັ້ງໜ້າ ເພື່ອປົວແປງຊີວິດການເປັນຢູ່ຂອງກຳມະກອນ ແລະຊາວນາ, ເພິ່ນເດັດດ່ຽວສະໜັບສະໜູນຄວາມສຳພັນລະຫວ່າງພັກກົກມິນຕັງ ກັບ ປະເທດລັດເຊຍໂຊວຽດ, ສະນັ້ນເພິ່ນຈຶ່ງເປັນຜູ້ທຳອິດທີ່ໄດ້ຮັບເຄາະຮ້າຍ ຈາກການປາບປາມຂອງພວກປະຕິການຈີນທີ່ຫາກໍ່ເລີ່ມຕົ້ນຂຶ້ນ.

ການເຄື່ອນໄຫວຂອງຫວງຽນອາຍກວັກຢູ່ກວາງເຈົາ ບໍ່ພົ້ນຈາກສາຍຕາຂອງນັກສືບສອດແນມຝະລັ່ງ. ຢູ່ພະແນກເກັບມ້ຽນເອກະສານຂອງກະຊວງອານານິຄົມຝະລັ່ງຍັງຮັກສາໂທລະເລກດ່ວນໄວ້ທີ່ມີເນື້ອໃນວ່າ:

" ຮ່າໂນ້ຍ ວັນທີ ໒໗ ເດືອນກຸມພາ ປີ ໑໙໒໕. ລັບທີ່ສຸດ.

ກອງຕຳຫລວດຮ່າໂນ້ຍໄດ້ຮັບຂ່າວວ່າ ມີຄົນອານນາມຜູ້ໜຶ່ງຫາກໍ່ມາແຕ່ ທະວີບເອີລົບ ໄດ້ມາຮອດກວາງເຈົາ. ຄົນຜູ້ນີ້ເລີ່ມຕິດຕໍ່ກັບພວກປະຕິວັດໂລກ. ເຂົາອາໄສຢູ່ກັບພວກກອມມູນິດລັດເຊຍ ແລະ ໃສ່ຊື່ວ່າ ຫລີຊຸຍ. ເຂົາຮູ້ດີ ກ່ຽວກັບການເຄື່ອນໄຫວຂອງນັກປະຕິວັດອານນາມຢູ່ທະວີບເອີລົບ ເຊັ່ນດຽວກັບແບບວິທີປະຕິວັດລັດເຊຍ. ໃນຖານະເປັນຄົນໜຶ່ງທີ່ຫາວຫັນທີ່ສຸດ, ຫລີຊຸຍ ໄດ້ສ້າງຕັ້ງສະມາຄົມຮັກຊາດໃໝ່ ສະມາຄົມໜຶ່ງຂຶ້ນ ແລະ ໄດ້ກໍ່ສ້າງນັກກອມມູນິດຢູ່ໃນຂອບເຂດຂອງສະມາຄົມນີ້ຮ່ວມກັບ ຄົນ

ອານນາມຈຳນວນໜຶ່ງທີ່ຍ້າຍຖິ່ນຖານມາຕັ້ງຢູ່ຈີນພາກໃຕ້. ພວກເຂົາຫາກໍພິມ ໃບປິວຮຽກຮ້ອງໃຫ້ຄົນສະໝັກເຂົ້າສະມາຄົມ. ໃບປິວຈຳນວນໜຶ່ງໄດ້ເລັດລອດເຂົ້າອິນດູຈີນ. ແມັກແລ້ວ".

ມີລາຍລະອຽດອັນໜຶ່ງທີ່ພວກນັກສືບສອດແນມຝະລັ່ງສັງເກດຢ່າງຖືກຕ້ອງທີ່ສຸດ. ເຖິງແມ່ນວ່າ ຫງວຽນອາຍກວັກ ຢູ່ໄກດິນແດນໂຊວຽດກໍຕາມ ແຕ່ໃນຕົວຈິງເພິ່ນບໍ່ຂາດການຕິດຕໍ່ກັບປະເທດລັດເຊຍແມ່ນແຕ່ມື້ດຽວ. ຫງວຽນອາຍກວັກຈົດຈຳ ຄຳຕັກເຕືອນຂອງມານູອິນສະກີ, ສະນັ້ນພໍແຕ່ມາຮອດກວາງເຈົາ, ເພິ່ນກໍໄດ້ຕິດຕໍ່ພົວພັນກັບ ໂບໂຣດິນໂລດ. ວຽກນີ້ບໍ່ຍາກປານໃດ. ເວລານັ້ນໜັງສືພິມກວາງເຈົາມັກລົງແຈ້ງຂ່າວທີ່ວ່າຄະນະຊ່ຽວຊານໂຊວຽດທີ່ສັງກັດລັດຖະບານ ຊຸນ ຢັດເຊັນ ຕ້ອງການນາຍພາສາ. ຫງວຽນອາຍກວັກກໍເປັນຄົນໜຶ່ງຮູ້ຄ່ອງແຄ້ວບາງພາສາເຊັ່ນ ຝະລັ່ງ, ອັງກິດ, ຈີນແລະຍັງຮູ້ພາສາລັດເຊຍດີສົມຄວນນຳອີກ. ເພື່ອຮັກສາຄວາມລັບ ເພິ່ນຖືເອົາໜັງສືພິມ "ກວາງເຈົາລາຍວັນ" ໄປທີ່ສຳນັກງານຄະນະຊ່ຽວຊານໂບໂຣດິນ ແລະ ຖືກຮັບ ເຂົ້າເຮັດວຽກໂລດ.

ໂບໂຣດິນ ມີອິດທິພົນອັນຍິ່ງໃຫຍ່ຢູ່ທີ່ກວາງເຈົາ. ເພິ່ນແມ່ນຄົນໂບນເຊວິກ ຄົນໜຶ່ງທີ່ມີບົດຮຽນຫລາຍ, ເພິ່ນເຂົ້າພັກກອມມູນິດປີ ໑໙໐໓ ເມື່ອອາຍຸເພິ່ນໄດ້ ໑໙ ປີ. ເພິ່ນໃຊ້ເວລາອັນຍາວນານລີ້ໄພຢູ່ຕ່າງປະເທດ. ພາຍຫລັງທີ່ການປະຕິວັດເດືອນ ຕຸລາໄດ້ຮັບໄຊຊະນະແລ້ວ, ເພິ່ນໄດ້ກັບຄືນປະເທດລັດເຊຍ. ພັກໄດ້ມອບວຽກງານ ອັນສຳຄັນໃຫ້ເພິ່ນນັ້ນຄືວຽກງານສຳພັນຕ່າງປະເທດຂອງພັກກອມມູນິດໂບນເຊວິກທົ່ວລັດເຊຍ, ເພິ່ນກຳກັບໂດຍກົງກ່ຽວກັບບັນຫາຂອງຂະບວນການກອມມູນິດສາກົນ ແລະ ສາກົນກອມມູນິດ. ໂບໂຣດິນຮູ້ຈັກກັບ ວ.ອີ.ເລນິນ ແລະ ໄດ້ຮັບຄວາມວາງໄວ້ໃຈຈາກເພິ່ນ ທີ່ສຸດ.

ຄວາມສຳພັນຖານສະຫາຍລະຫວ່າງ ຫງວຽນອາຍກວັກ ກັບ ໂບໂຣດິນ ທີ່ປຶກສາການເມືອງໃຫຍ່ຂອງ ຊຸນ ຢັດເຊັນ ໄດ້ເລີ່ມຂຶ້ນນັບແຕ່ມື້ທຳອິດພຸ້ນ. ໂບໂຣດິນ ມັກຈະໃຫ້ຄຳແນະນຳອັນຈຳເປັນ ແລະ ໃຫ້ການຊ່ວຍເຫລືອຕົວຈິງແກ່ນັກກອມມູນິດ ຫວຽດນາມຢູ່ສະເໝີ. ການຊ່ວຍເຫລືອດັ່ງກ່າວແມ່ນສິ່ງທີ່ຫງວຽນອາຍກວັກຕ້ອງການທີ່ສຸດໃນການປັບປຸງວຽກງານຈັດຕັ້ງ, ການເມືອງແລະ ແນວຄິດໃນໝູ່ຊາວຫວຽດນາມຮັກຊາດທີ່ຕັ້ງຖິ່ນຖານຢູ່ພາກໃຕ້ຈີນ. ໂບໂຣດິນ ຊ່ວຍຫງວຽນອາຍກວັກ ເລືອກເຟັ້ນເອົາ ບັນດາ

ຊາວໜຸ່ມຮັກຊາດຜູ້ດີເດັ່ນທີ່ສຸດຢູ່ໃນສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ເພື່ອສົ່ງໄປຮຽນຢູ່ມະຫາວິທະຍາໄລກອມມູນິດຂອງຊາວຜູ້ອອກແຮງງານພາກຕາເວັນອອກ. ໃນຕົ້ນປີ ໑໙໒໕ ງຸທຳອິດມີ ໕ ຄົນ ໃນນັ້ນມີ ເລຮົ່ງຟອງ, ຊາວໜຸ່ມຄົນໜຶ່ງຊຶ່ງເປັນ ໄທບ້ານດຽວກັບຫວຽນອາຍກວັກ ຖືກສົ່ງໄປຮອດມົດສະກູ. ໂບໂຣດິນແນະນຳບັນດາຄູອາຈານໂຊວຽດທີ່ປະຕິບັດວຽກງານຢູ່ວິທະຍາຄານທະຫານການເມືອງຮ່ວາງໂຟໃຫ້ມາສອນຢູ່ຊຸດຮຽນ ຊຶ່ງຫວຽນອາຍກວັກເປັນຜູ້ຈັດຕັ້ງຂຶ້ນ. ໃນຈຳນວນຄູອາຈານເຫຼົ່ານັ້ນມີບັນດາຜູ້ບັນຊາການທະຫານຜູ້ມີຊື່ສຽງ, ບັນດາວິລະຊົນຂອງສົງຄາມກາງເມືອງ ເຊັ່ນ ວ.ກ.ບະລິວແຄ (ເວລານັ້ນໃສ່ຊື່ວ່າ ກາລິນ ແລະ ຈາກນັ້ນມາເລື່ອນຊັ້ນຂຶ້ນເປັນ ຈອມພົນ), ປ.ອ.ປາບລົບ, ມ.ວ.ກູຍບີແຊັບ (ນ້ອງຂອງ ວ.ວ.ກູຍບີແຊັບ), ວ.ມ. ປີມາກົບ ແລະ ບັນດາສະຫາຍອື່ນໆ.

ສຳນັກງານຂອງ ໂບໂຣດິນ ທີ່ປຶກສາການເມືອງໃຫຍ່ຂອງລັດຖະບານກວາງ - ເຈົາຕັ້ງຢູ່ຕຶກສີ່ຫມື່ນເຊິ່ງໜ້າກັນກັບສຳນັກງານຄະນະບໍລິຫານງານພັກກົກມິນຕັງ. ໂບໂຣດິນ ພ້ອມຄອບຄົວພັກຢູ່ຊັ້ນສອງ. ຢູ່ຊັ້ນໜຶ່ງແມ່ນທີ່ທຳງານຂອງບັນດານາຍພາສາ . ເຈືອງທາຍໂລຍ ທີ່ປຶກສາ ແລະ ຜູ້ຊ່ວຍວຽກຂອງໂບໂຣດິນ ທັງເປັນຫົວໜ້າ ພະແນກນາຍພາສາ. ພາຍລຸນມາ ເຈືອງທາຍໂລຍມີຊື່ສຽງເປັນວິລະຊົນຂອງກອມມູນ ກວາງເຈົາ. ຫວຽນອາຍກວັກກົ້ມໜ້າກົ້ມຕາເຮັດວຽກເກືອບທັງວັນຢູ່ໃນຕຶກຫລັງນີ້. ຢູ່ບ່ອນນີ້ ເພິ່ນຈົມຢູ່ໃນໜັງສືພິມທີ່ມີທັງພາສາອັງກິດ ແລະ ຈີນ ເພື່ອເກັບກຳຂ່າວສົ່ງໄປ ໃຫ້ຂ່າວສານປະເທດລັດເຊຍ, ເພາະວ່າກ່ອນອອກເດີນທາງມາປະເທດຈີນ ຫວຽນ ໄດ້ຮັບຂໍ້ສະເໜີຂອງຂ່າວສານນີ້ໃຫ້ເປັນນັກຂ່າວອາສາສະໝັກຕ່າງປະເທດກ່ຽວກັບ ພາກໃຕ້ຈີນ ແລະ ອິນດູຈີນ.

ວ.ວ. ວິສຍິອາໂກວາ-ອາກີໂມວາ ພະນັກງານຍິງຄົນໜຶ່ງທີ່ເຮັດວຽກຢູ່ສຳນັກງານ ໂບໂຣດິນ ໄດ້ຂຽນໄວ້ຕອນໜຶ່ງ ຢູ່ໃນປຶ້ມ "ສອງປີຢູ່ປະເທດຈີນທີ່ລຸກຮື້ອນ" ດັ່ງນີ້:

" ຢູ່ເຮືອນ ມ.ມ.ໂບໂຣດິນ, ຂ້ອຍເປັນຜູ້ໂຊກດີໄດ້ຮູ້ຈັກກັບໜຶ່ງ ໃນຈຳນວນບຸກຄົນຜູ້ດີເດັ່ນ ຢູ່ກວາງເຈົາໃນເວລານັ້ນ. ເພິ່ນຊື່ ຫລີ ຊຸຍ, ເປັນຄົນຫວຽດນາມ. ພວກຂ້ອຍມັກເອີ້ນຊື່ເພິ່ນແບບຢອກໃຍວ່າ ຫລີ ອານນາມ.

ມາດຽວນີ້ ຂ້ອຍກໍຍັງຈື່ບໍລືມຮູບຮ່າງຈ່ອຍປານກາງຂອງເພິ່ນ. ເພິ່ນເວົ້າພາສາ

ຝະລັ່ງ, ອັງກິດ, ພາສາກວາງເຈົາ ແລະ ພາສາລັດເຊຍໄດ້ຢ່າງຄ່ອງແຄ້ວ. ເພິ່ນຍັງສອນພາສາຫວຽດໃຫ້ຂ້ອຍ. ສິ່ງນີ້ເຮັດໃຫ້ເພິ່ນປິຕິຊຸມຊື່ນ ແລະ ກໍເຕັມໃຈສິດສອນຂ້ອຍ. ເພິ່ນມີທ່າທີເປັນເພື່ອນມິດກັບພວກເຮົາ ແຕ່ສະຫງົບສະຫງ່ຽມ, ເພິ່ນບໍ່ເຄີຍເວົ້າກ່ຽວກັບວຽກງານທີ່ກຳລັງເຮັດຫລື ທີ່ເຮັດມາແລ້ວຈັກເທື່ອ. ພວກຂ້ອຍບໍ່ຮູ້ຫຍັງກ່ຽວກັບໂຕເພິ່ນ ນອກເໜືອຈາກການທີ່ພວກລ່າເມືອງຂຶ້ນຝະລັ່ງໄດ້ຕັ້ງລາງວັນໃຫ້ແກ່ຜູ້ທີ່ຈັບຕົວເພິ່ນໄດ້ ແລະ ການທີ່ລັດຖະບານກົກມິນຕັງ ໄດ້ອະນຸຍາດ ໃຫ້ເພິ່ນລີ້ໄພການເມືອງ. ຄອບຄົວ ໂບໂຣດິນ ຖືວ່າເພິ່ນເປັນຄົນໄທເຮືອນດຽວ...

ຫລາຍປີຜ່ານໄປ ຂ້ອຍຈຶ່ງຮູ້ຈາກເມຍສະຫາຍ ໂບໂຣດິນວ່າ ຫລີ ອານນາມຂອງພວກຂ້ອຍບໍ່ແມ່ນໃຜອື່ນ ແທ້ຈິງແລ້ວກໍຄື ສະຫາຍ ໂຮ່ຈີມິນ ນັ້ນເອງ".

ໃນຕອນຕົ້ນປີ ໑໙໒໗, "ສະຫະພັນປະຊາຊາດອາຊີ ທີ່ຖືກກົດຂີ່" ໄດ້ພິມຈຳໜ່າຍປຶ້ມນ້ອຍຫົວໜຶ່ງທີ່ມີຊື່ວ່າ "ເສັ້ນທາງປະຕິວັດ". ປຶ້ມເຫລັ້ມນີ້ບໍ່ໃສ່ຊື່ຜູ້ແຕ່ງ ມັນໄດ້ຖືກແຈກຢາຍໃນໝູ່ຊາວຫວຽດນາມຕ່າງດ້າວຢູ່ກວາງເຈົາ. ເຖິງແມ່ນວ່າປຶ້ມຫົວນີ້ບໍ່ໃສ່ຊື່ຜູ້ແຕ່ງກໍຕາມ ແຕ່ຜູ້ໃດຫາກໄດ້ຜ່ານຊຸດຮຽນການເມືອງ ລ້ວນແຕ່ເດົາອອກທັນທີວ່າຜູ້ແຕ່ງປຶ້ມຫົວນີ້ແມ່ນສະຫາຍເວືອງຢ່າງແນ່ນອນ, ເພາະວ່າ ປຶ້ມຫົວນີ້ສັງລວມ ບົດສອນຂອງສະຫາຍເອງ ຊຶ່ງເວົ້າກ່ຽວກັບລັດທິເລນິນ ແລະ ໜ້າທີ່ ຂອງການປະຕິວັດຫວຽດນາມ. ປຶ້ມ "ເສັ້ນທາງປະຕິວັດ" ຂຽນຂຶ້ນເພື່ອເປັນການສືບຕໍ່ຂອງປຶ້ມ "ສານກ່າວຟ້ອງລະບອບລ່າເມືອງຂຶ້ນຝະລັ່ງ". ຖ້າວ່າຢູ່ໃນປຶ້ມຫົວທີໜຶ່ງນັ້ນ ຫງວຽນອາຍກວັກເດັດດ່ຽວເຜີຍແຜຢ່າງບໍ່ອິດູກູມາກ່ຽວກັບໂທດກຳຂອງຈັກກະພັດຝະລັ່ງທີ່ກໍ່ຂຶ້ນຢູ່ບົນ ດິນແດນເມືອງຂຶ້ນອັນກວ້າງໃຫຍ່ໄພສານຂອງພວກມັນ ສ່ວນໃນປຶ້ມ "ເສັ້ນທາງ ປະຕິວັດ" ຫງວຽນອາຍກວັກ ຊີ້ໃຫ້ເຫັນເຖິງເສັ້ນທາງຕົວຈິງ ເພື່ອປົດປ່ອຍຊາດ.

ຜູ້ແຕ່ງປຶ້ມຊີ້ໃຫ້ເຫັນວ່າ ເພື່ອຢາກຕີຊະນະສັດຕູທີ່ເຂັ້ມແຂງ, ນັກປະຕິວັດຫວຽດນາມຕ້ອງຖືວ່າໜ້າທີ່ອັນດັບໜຶ່ງທີ່ຕ້ອງປະຕິບັດ ແມ່ນສອງໜ້າທີ່ພື້ນຖານຄື ກຳແໜ້ນທິດສະດີປະຕິວັດທີ່ກ້າວໜ້າ ເຊິ່ງໄດ້ແກ່ລັດທິມາກ - ເລນິນ ແລະ ກໍ່ສ້າງກອງລະວັງໜ້າ ຊຶ່ງໄດ້ແກ່ພັກປະຕິວັດ. "ຄວາມຈຳເປັນໃນການສ້າງຕັ້ງພັກ ໄດ້ເກີດຈາກຄວາມຈິງທີ່ວ່າ ດ້ານໜຶ່ງ, ພັກຕ້ອງປູກລະດົມ ແລະ ຈັດຕັ້ງມວນໝູ່ມະຫາຊົນຢູ່ພາຍໃນ ປະເທດ ອີກດ້ານໜຶ່ງ ພັກຕ້ອງຕິດຕໍ່ກັບພາຍນອກ ໝາຍຄວາມວ່າ ກັບປະຊາຊາດ ທີ່ຖືກກົດຂີ່ ແລະ ຊົນຊັ້ນກຳມາຊີບຢູ່ທຸກປະເທດ. ການປະຕິວັດຈະສາມາດເອົາຊະນະໄດ້ກໍ່ຕໍ່

ເມື່ອມີພັກທີ່ແຂງແກ່ນ, ເພື່ອຢາກໄດ້ພັກທີ່ແຂງແກ່ນ ພັກຕ້ອງມີທິດສະດີປະຕິວັດທີ່ສຸດກົກສຸດປາຍ ແລະ ສະມາຊິກພັກຫມົດທຸກຄົນຕ້ອງເອົາທິດສະດີນັ້ນເປັນເຂັມທິດຊີ້ນຳ. ພັກທີ່ບໍ່ມີທິດສະດີກໍເທົ່າກັບຄົນທີ່ບໍ່ມີສະຕິປັນຍາ, ເທົ່າກັບກຳປັ່ນທີ່ບໍ່ມີເຂັມຊີ້ທິດ".

ຫງວຽນອາຍກວັກໄດ້ອະທິບາຍຢ່າງມີຫົວຄິດປະດິດສ້າງກ່ຽວກັບຫລັກມູນພື້ນຖານແຫ່ງທິດສະດີປະຕິວັດຂອງເລນິນ ເພື່ອໃຫ້ແທດເຫມາະກັບບັນດາເງື່ອນໄຂປະຫວັດສາດຕົວຈິງ ຂອງປະເທດຫວຽດນາມເມືອງຂຶ້ນ. ຫງວຽນອາຍກວັກຊີ້ໃຫ້ເຫັນວ່າ ຫວຽດນາມກຳລັງຢືນຢູ່ປາກປະຕູຂອງການປະຕິວັດປົດປ່ອຍຊາດ. ການປະຕິວັດດັ່ງກ່າວ ຕ້ອງແມ່ນໄລຍະລະຫວ່າງກາງບົນເສັ້ນທາງທີ່ນຳເອົາປະເທດກ້າວໄປສູ່ການປະຕິວັດສັງຄົມນິຍົມ, ໂດຍບໍ່ຜ່ານໄລຍະຂະຫຍາຍຕົວແບບທຶນນິຍົມ. ຫນ້າທີ່ສຳຄັນຂອງພັກມາກຊິດ-ເລນິນນິດ ໃນອະນາຄົດ ຢູ່ຫວຽດນາມ ແມ່ນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ. ບົນຈິດໃຈດັ່ງກ່າວນີ້, ຫງວຽນອາຍກວັກໄດ້ເສີມຂະຫຍາຍຫລັກມູນຂອງເລນິນ ກ່ຽວກັບສິ່ງທີ່ວ່າ ພັກກອມມູນິດເປັນຜູ້ນຳເອົາລັດທິສັງຄົມນິຍົມມາສູ່ຂະບວນການກຳມະກອນ ດ້ວຍວິທີປຸກລະດົມນ້ຳໃຈຮັກຊາດລະດັບທົ່ວຊາດຂຶ້ນ. ຕາມຄວາມເຫັນຂອງຫງວຽນອາຍກວັກ, ກຳລັງດັນພື້ນຖານຂອງການປະຕິວັດຫວຽດນາມແມ່ນຊົນຊັ້ນຊາວນາ ແລະ ຊົນຊັ້ນ ກຳມະກອນຊຶ່ງກຳລັງເປັນຮູບເປັນຮ່າງ ຫມາຍຄວາມວ່າພາກສ່ວນໃຫຍ່ຂອງຊົນຊາດຊົນເຜົ່າທີ່ຢາກປົດປ່ອຍປະເທດຊາດຕົນ; ດັ່ງນັ້ນ ໃນເງື່ອນໄຂຂອງການປະຕິວັດຫວຽດນາມ ລັດທິຮັກຊາດຈຶ່ງມີລັກສະນະປະຊາຊົນ ແລະ ມີລັກສະນະຊົນຊັ້ນ.

ຫລັກມູນອັນສຳຄັນດັ່ງກ່າວທີ່ຫງວຽນອາຍກວັກໄດ້ຍົກຂຶ້ນມາຕັ້ງແຕ່ແລກເລີ່ມຂອງການປະຕິວັດປົດປ່ອຍຊາດໃນອະນາຄົດ ໃນເວລາຕໍ່ມາໄດ້ກາຍເປັນຫລັກມູນທີ່ຊີ້ນຳ ນຳພາ ຢູ່ໃນການເຄື່ອນໄຫວຂອງຫງວຽນອາຍກວັກ ແລະ ຂອງເພື່ອນຮ່ວມຮົບຂອງເພິ່ນ. ສິ່ງດັ່ງກ່າວອຳນວຍໃຫ້ພັກກອມມູນິດຫວຽດນາມ ເຖິງແມ່ນວ່າມີຈຳນວນພົນ ບໍ່ຫລາຍກໍຕາມ, ແຕ່ຫາກສາມາດຊັກຈູງປະຊາຊົນໄປນຳຕົນໃນໄລຍະຫົວລ້ຽວຫົວຕໍ່ ສິ່ງດັ່ງກ່າວນີ້ເປັນປັດໄຈຕັດສິນຊີ້ຂາດຂອງໄຊຊະນະໃນຂັ້ນລຸກຮື້ຂຶ້ນປະກອບອາວຸດທົ່ວປະເທດ ໃນເບື້ອງຕົ້ນ ແລະ ເວລາຕໍ່ມາຢູ່ໃນສົງຄາມຕໍ່ຕ້ານຍາວນານສອງໄລຍະ.

ເພື່ອຕີລາຄາຄວາມຫມາຍຂອງຂໍ້ສະຫລຸບທີ່ຫງວຽນອາຍກວັກຖອດອອກມານັ້ນໃຫ້ຖືກຕ້ອງ, ເຫັນສົມຄວນຕ້ອງທວນຄືນເຖິງຄວາມຈິງທີ່ວ່າ ບັນດາຜູ້ຕາງຫນ້າ ທີ່ມີຊື່ສຽງຫລາຍຄົນຂອງຂະບວນປົດປ່ອຍຊາດໃນໂລກ ຮ່ວມສະໄຫມດຽວກັບ ຫງວຽນອາຍກວັກ

ບໍ່ສາມາດເຂົ້າໃຈກ່ຽວກັບການພົວພັນຊຶ່ງກັນ ແລະ ກັນ ລະຫວ່າງການຕໍ່ສູ້ຊົນຊັ້ນ ກັບການຕໍ່ສູ້ປົດປ່ອຍຊາດ. ພວກເຂົາເຈົ້າຖືວ່າອາດຈະຍາດເອົາເອກະລາດແຫ່ງຊາດ ໄດ້ໂດຍປາສະຈາກລັດທິສັງຄົມນິຍົມ ດ້ວຍເຫດນັ້ນ ພວກເຂົາເຈົ້າຈຶ່ງບໍ່ໄດ້ ຮຽກຮ້ອງໃຫ້ເດີນຕາມເສັ້ນທາງຂອງຊົນຊັ້ນກຳມາຊີບລັດເຊຍ ແຕ່ຫາກຍັງຈຳກັດການຕໍ່ສູ້ ປົດປ່ອຍຊາດຂອງຕົນ ຢູ່ພຽງແຕ່ການຕໍ່ສູ້ຕ້ານພວກຮຸກຮານຕ່າງປະເທດ. ສ່ວນ ຫງວຽນອາຍກວັກ, ເລີ່ມແຕ່ເວລາທີ່ເພິ່ນເດີນຕາມລັດທິເລນິນ ແລະ ເປັນນັກສາກົນນິຍົມນັ້ນ ຖືວ່າສອງໜ້າທີ່ ຄື ປົດປ່ອຍຊາດ ແລະ ລັດທິສັງຄົມນິຍົມ ຍາມໃດກໍຕິດພັນນຳກັນຢ່າງ ສະໜິດແໜ້ນ. "ມີແຕ່ລັດທິສັງຄົມນິຍົມ ແລະ ລັດທິກອມມູນິດເທົ່ານັ້ນ ຈຶ່ງສາມາດ ເຮັດໃຫ້ບັນດາປະຊາຊາດໄດ້ຮັບການປົດປ່ອຍຢ່າງສິ້ນເຊີງ", ຄຳເວົ້າດັ່ງກ່າວຂອງຫງວຽນອາຍກວັກ ກາຍເປັນຄຳຂວັນຂອງການປະຕິວັດຫວຽດນາມ.

ຜູ້ແຕ່ງ "ເສັ້ນທາງປະຕິວັດ" ໄດ້ເສີມຂະຫຍາຍແນວຄິດ ຂອງຕົນອອກໄປອີກໂດຍຊີ້ໃຫ້ເຫັນວ່າ ລັດທິຮັກຊາດຢ່າງແທ້ຈິງບໍ່ອາດຈະຕັດຂາດອອກຈາກລັດທິສາກົນ ກຳມາຊີບ. ດັ່ງນັ້ນ ໜ້າທີ່ສາກົນອັນສຳຄັນທີ່ສຸດຂອງບັນດານັກປະຕິວັດຫວຽດນາມຈຶ່ງແມ່ນຕ້ອງເອົາໃຈໃສ່ຄົ້ນຄວ້າບົດຮຽນຂອງການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່ຢູ່ລັດເຊຍ. ບົດຮຽນພື້ນຖານຂອງການປະຕິວັດດັ່ງກ່າວຄື: ຕ້ອງມີພັກມາກ-ເລນິນທີ່ກ້າແກ່ນ; ຊົນຊັ້ນກຳມະກອນ ແລະ ຊາວນາຕ້ອງກາຍເປັນກຳລັງດັນສຳຄັນຂອງການປະຕິວັດ; ຕ້ອງຮຽກຮ້ອງໃຫ້ມະຫາຊົນມີນ້ຳໃຈກຽມພ້ອມເສຍສະຫລະ ແລະ ມີຄວາມສາມັກຄີຫລາຍຂຶ້ນກວ່າເກົ່າ. ເສັ້ນທາງຂອງການປະຕິວັດຫວຽດນາມແມ່ນ ເສັ້ນທາງຂອງມະຫາປະຕິວັດເດືອນຕຸລາ. ການຕໍ່ສູ້ຂອງຊົນຊັ້ນກຳມາຊີບລັດເຊຍແມ່ນແບບຢ່າງສຳລັບ ປະຊາຊົນຫວຽດນາມ. ຂະບວນການປົດປ່ອຍຊາດຢູ່ບັນດາເມືອງຂຶ້ນຕ້ອງຮ່ວມສຳພັນກັບຊົນຊັ້ນກຳມາຊີບປະຕິວັດຂອງເມືອງແມ່. ຕ້ອງປັດເຂ່ຍແນວຄິດ "ຈຳແນກເຊື້ອຊາດຜິວເຫລືອງ" ຢ່າງເດັດດ່ຽວ ຊຶ່ງໃນເມື່ອກ່ອນນັ້ນຄອບງຳຢູ່ໃນຈິດໃຈຂອງນັກຮັກຊາດຫວຽດນາມ ທີ່ມີຊື່ສຽງຈຳນວນໜຶ່ງ ການນຳເອົາການຕໍ່ສູ້ຂອງປະຊາຊົນຫວຽດນາມໄປເຊື່ອມຈອດ ແລະ ຕິດພັນເຂົ້າກັບຂະບວນການປະຕິວັດໂລກ ແມ່ນບັນຫາໜຶ່ງທີ່ມີຄວາມສຳຄັນທາງ ຍຸດທະສາດ. "ການປະຕິວັດຫວຽດນາມແມ່ນພາກສ່ວນໜຶ່ງຂອງການປະຕິວັດໂລກ. ນັກປະຕິວັດທັງໝົດລ້ວນແຕ່ແມ່ນເພື່ອນມິດຂອງປະຊາຊົນຫວຽດນາມ".

ຫງວຽນອາຍກວັກໄດ້ຂຽນບົດໜຶ່ງເປັນພິເສດກ່ຽວກັບບັນຫາສົນທຳປະຕິວັດ ທີ່

ຍາມໃດເພິ່ນກໍເອົາໃຈໃສ່ທີ່ສຸດ. ຫງວຽນອາຍກວັກ ຖືວ່າພັກຈະມີຄວາມເດັດດ່ຽວ ກ້າແກ່ນ ແລະ ມີຄວາມສາມາດສູ້ຣົບໄດ້ ກໍຕໍ່ເມື່ອຮູ້ໝູນໃຊ້ທິດສະດີປະຕິວັດກ້າວໜ້າແລະປະກອບດ້ວຍຄົນ ທີ່ມີຄຸນສົມບັດຂອງນັກປະຕິວັດ ອັນແທ້ຈິງ. ສຳລັບຫງວຽນອາຍກວັກແລ້ວ, ຄຸນສົມບັດອັນຈຳເປັນຂອງນັກປະຕິວັດ ແມ່ນນ້ຳໃຈປະຕິວັດອັນເດັດດ່ຽວ, ຈິດໃຈຕັ້ງຕໍ່ບໍລິສຸດຕໍ່ການປະຕິວັດ, ຕຽມພ້ອມເສຍສະຫລະ, ສະແຫວງຫາຄວາມເປັນ ເອກະພາບ ຣັກການອອກແຣງງານ, ປະຢັດມັດທະຍັດ, ບໍ່ມີແນວຄິດເຫັນແກ່ຕົວ, ເປັນຫ່ວງເປັນໃຍນຳຄວາມອຸດົມສົມບູນຂອງສັງຄົມ ຕຳໜິຕົນເອງ, ບໍ່ທະເຍີທະຍານ, ບໍ່ອວດອ້າງ, ອົດທົນຕໍ່ຄວາມທຸກຍາກຂາດເຂີນ, ບໍ່ເຫັນແກ່ຊັບສິນວັດຖຸ ແລະອື່ນໆ...

"ເສັ້ນທາງປະຕິວັດ" ແມ່ນປຶ້ມຫົວທຳອິດຂອງນັກແຕ່ງຫວຽດນາມຄົນໜຶ່ງ ທີ່ໄດ້ອະທິບາຍແຈ້ງທາດແທ້ຂອງທິດສະດີເລນິນ, ໄດ້ເວົ້າກ່ຽວກັບຄວາມໝາຍຂອງລັດທິສາກົນກຳມາຊີບ, ກ່ຽວກັບໜ້າທີ່ຂອງການປະຕິວັດຫວຽດນາມ. ເຊັ່ນດຽວກັນກັບປຶ້ມນ້ອຍຂອງເລນິນ "ເຖິງຊາວນາທຸກ", ໃນປຶ້ມເຫລັ້ມນັ້ນບັນຫາທິດສະດີທີ່ສັບສົນນັ້ນ ໄດ້ຖືກອະທິບາຍດ້ວຍວິທີທີ່ເຣັດໃຫ້ເຂົ້າໃຈໄດ້ຢ່າງງ່າຍດາຍ ເພື່ອໃຫ້ມວນໝູ່ມະຫາຊົນ ຫວຽດນາມເຂົ້າໃຈງ່າຍ. ອາດເວົ້າໄດ້ວ່າ ຢູ່ໃນປະຫວັດສາດຂອງການປະຕິວັດ ຫວຽດນາມປຶ້ມ "ເສັ້ນທາງປະຕິວັດ" ຂອງຫງວຽນອາຍກວັກ ມີບົດບາດເທົ່າທຽມກັບປຶ້ມ " ຈະເຣັດຫຍັງ?" ຂອງເລນິນ ສຳລັບຂະບວນການປະຕິວັດລັດເຊຍ. ອີງຕາມການຕີລາຄາຂອງນັກປະຫວັດສາດຫວຽດນາມ ປຶ້ມ "ເສັ້ນທາງປະຕິວັດ" ໄດ້ເປັນພື້ນຖານ ໃຫ້ແກ່ການສ້າງຕັ້ງພັກກອມມູນິດອິນດູຈີນໃນອະນາຄົດ ແລະ ເປັນພື້ນຖານອັນທຳອິດ ໃຫ້ແກ່ໂຄງການການເມືອງຂອງພັກ. ສະຫາຍ ເລຢວນ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ແລະ ບັນດາບຸກຄົນສຳຄັນຂອງພັກ ແລະ ລັດຫວຽດນາມຫວນຄືນວ່າ ເຂົາເຈົ້າເລີ່ມຄົ້ນຄວ້າປຶ້ມກ່ຽວກັບລັດທິມາກ ກໍແມ່ນຈາກ ປຶ້ມ "ເສັ້ນທາງປະຕິວັດ" ຂອງຫງວຽນອາຍກວັກນັ້ນລະ ກະໂຕປຶ້ມຫົວນີ້ໄດ້ຜູກພັນຊາຕາກຳຂອງບັນດາສະຫາຍເຫລົ່ານັ້ນກັບການຕໍ່ສູ້ປະຕິວັດຂອງປະຊາຊົນຜູ້ອອກແຣງງານ ຕະຫລອດການ.

ໃນເວລາສອງປີເຄິ່ງ, ຫງວຽນອາຍກວັກໄດ້ເຣັດວຽກງານຢ່າງເກີດດອກອອກ

ພົມ ແລະ ມີປະສິດທິພາບຢ່າງວິເສດ ພາຍໃຕ້ເງື່ອນໄຂທີ່ເອື້ອອຳນວຍສຸດຂະໜາດ , ພົມທີ່ໄດ້ມາຈາກວຽກງານດັ່ງກ່າວນັ້ນແມ່ນ ເພິ່ນກໍ່ສ້າງພະນັກງານຫລັກແຫລ່ງໄດ້ເກືອບ ໔໐໐ ຄົນ, ພະນັກງານເຫລົ່ານີ້ ໃນອະນາຄົດຈະກາຍເປັນແກ່ນສານໃຫ້ແກ່ພັກ ການເມືອງຂອງຈົນຊຸ້ນຈຸນກຳມະກອນ. ສຳລັບນັກປະຕິວັດອາຊີບແລ້ວຍັງຈະໄຝ່ຝັນຫາຫຍັງຫລາຍກວ່ານີ້ອີກລະ ! ເປັນຄວາມຮູ້ສຶກທີ່ເຈັບປວດເມື່ອເຫັນວ່າ ວຽກງານດັ່ງກ່າວ ໃກ້ຈະຈົບລົງແລ້ວ. ຫອງຟ້າການເມືອງກວາງເຈົາຍິ່ງນັບວັນຍິ່ງມີເມກໝອກດຳປົກຫຸ້ມ. ໂດຍເລີ່ມຈາກການກໍ່ກວນບຸກຄົນ ສຸດທ້າຍ ພວກປະຕິການກໍ່ໄດ້ລົງມືປະຕິບັດ ການບຸກໂຈມຕີເຂົ້າຫູກງດານ.

ໃນວັນທີ ໑໔ ເດືອນເມສາປີ ໑໙໔໗, ຈຽງໄຄເຊັກ ໄດ້ເຮັດລັດຖະປະຫານຕ້ານການປະຕິວັດຢູ່ຊຽງໄຮ້. ວັນຕໍ່ມາ ນາຍພົນຫລີເທືອ ໝານ ລູກນ້ອງຂອງ ຈຽງ ໄຄ ເຊັກ ໄດ້ເຮັດລັດຖະປະຫານຢູ່ທີ່ກວາງເຈົາ. ກອງທັບຝ່າຍຂວາ ໄດ້ທຳລາຍວິທະຍາຄານທະຫານ-ການເມືອງຮ່ວາງໂຟ. ນັກຮຽນ ໓໐໐ ຄົນຖືກຈັບກຸມ ແລະ ຖືກສົ່ງ ໄປຂັງໄວ້ຢູ່ຄຸກທີ່ຕັ້ງຢູ່ແຄມແມ່ນ້ຳເຈົາຢາງ. ການຈັບກຸມ ແລະ ການກວາດລ້າງ ດຳເນີນໄປຢູ່ໃນຕົວເມືອງແຫ່ງນີ້ຕັ້ງເປັນຫລາຍວັນຕິດຕໍ່ກັນ. ພວກຝິ່ນປະຕິວັດຈັບກຸມຄົນ ໄດ້ເກືອບສອງພັນຄົນ, ສະມາຊິກພັກກອມມູນິດຫລາຍຮ້ອຍຄົນຖືກຈັບໄປຂ້າຖິ້ມ. ພວກເຂົາຍັງໄດ້ຈັບກຸມຮອດວ່າສະມາຊິກຂອງລັດຖະບານ ແລະ ອົງຄະນະພັກກົກມິນຕັ່ງຂັ້ນແຂວງທີ່ພວກເຂົາສົງໄສວ່າແມ່ນຄົນຂອງພັກກອມມູນິດ. ຢູ່ຕົງເຊີນ, ເຂດນອກເມືອງ ກວາງເຈົາ ກອງທັບຝ່າຍຂວາໄດ້ປິດລ້ອມທຳພັກຂອງທີ່ປຶກສາໂຊວຽດ.

ພາຍຫລັງລັດຖະປະຫານສອງສາມວັນ ໂບໂຣດິນ ໄດ້ຍ້າຍສຳນັກງານຂອງເພິ່ນໄປຢູ່ວູຫານ, ຢູ່ແຫ່ງນັ້ນໄດ້ຮັກສາອຳນາດການປົກຄອງຂອງລັດຖະບານແຫ່ງຊາດພັກກົກມິນຕັ່ງຝ່າຍຊ້າຍໄວ້ໄດ້. ສ່ວນຫວວຽນອາຍກວັກ ຍັງຢູ່ທີ່ກວາງເຈົາ ແຕ່ຈຳເປັນ ຕ້ອງຊອກຫາທີ່ພັກ ແລະ ບ່ອນເຮັດວຽກໃໝ່. ອີກເທື່ອໜຶ່ງ ຄືກັນກັບເມື່ອຄາວຢູ່ທີ່ ປາຣີແດນໄກ ເພິ່ນຕ້ອງດຳລົງຊີວິດຢູ່ດ້ວຍຄວາມອຶດຫິວ, ສ່ວນວຽກເຮັດນັ້ນກໍ ບໍ່ເປັນປົກກະຕິ. ບາງຄັ້ງກໍໄປຂາຍໜັງສືພິມ, ຂາຍຢາສູບຢູ່ຕາມຖະໜົນ ເພື່ອລ້ຽງຊີບ. ອີກເທື່ອໜຶ່ງ, ເພິ່ນຕ້ອງກັບຄືນເຄື່ອນໄຫວໃຕ້ດິນ ຍ້ອນວ່າ ພວກຈຽງໄຄເຊັກ ຮູ້ແຈ້ງ ກ່ຽວກັບການພົວພັນຂອງຫວວຽນອາຍກວັກກັບໂບໂຣດິນ ແລະ ກັບສະມາຊິກພັກກົກມິນຕັ່ງຝ່າຍຊ້າຍ.

ຕອນກາງຄືນຂອງເດືອນ ພຶດສະພາອັນອົບອຸ່ນ, ມີຄົນຫວຽດນາມຜູ້ໜຶ່ງ ຊື່ ລິນ ຊຶ່ງເຮັດວຽກຢູ່ສຳນັກງານຮັກສາຄວາມປອດໄພຂອງພັກກົກມິນຕັງ ໄດ້ມາເຄາະປະຕູຫ້ອງນອນອັນມືດ ແລະ ແຄບໆ ຂອງຫງວຽນອາຍກວັກ ທີ່ຕັ້ງຢູ່ນອກເມືອງ. ເມື່ອບານປະຕູເປີດອອກ, ລິນ ຊຸບຊິບບອກຂ່າວວ່າ :

"ສະຫາຍເວືອງ ! ໄດ້ມີຄຳສັ່ງຈັບສະຫາຍແລ້ວໄດ໋, ຕ້ອງໜີອອກຈາກເມືອງນີ້ ເສຍໂດຍໄວ".

ສອງສາມຊົ່ວໂມງຕໍ່ມາ ຫງວຽນອາຍກວັກກໍນັ່ງຢູ່ໃນຕູ້ຂະບວນລົດໄຟສາຍກວາງເຈົາ-ຮົ່ງກົງ. ເວລາຜ່ານໄປຊົ່ວໂມງກວ່າ ແລະ ລົດໄຟແລ່ນຂ້າມຂົວເລົາ ທີ່ແຍກແຂວງ ກວາງຕຸ້ງຂອງຈີນອອກຈາກ ອານານິຄົມຂອງອັງກິດ. ເຈົ້າໜ້າທີ່ຕຳຫຼວດທ້ອງຖິ່ນຢູ່ສະຖານີລົດໄຟເກົາລູນ ໄດ້ກວດກາຢ່າງເຂັ້ມງວດ ໂດຍສະເພາະແມ່ນຜູ້ໂດຍສານທີ່ມາແຕ່ກວາງເຈົາແດງ. ພວກເຂົາໄດ້ກັກຕົວຫງວຽນອາຍກວັກໄວ້ ຍ້ອນວ່າ ໜັງສືເດີນທາງຂອງເພິ່ນໃສ່ຊື່ ທເລີ ຊຸຍ ຂ້າລັດຖະການຈີນ ເບິ່ງຄືວ່າໜ້າສົງໄສ ສຳລັບນາຍທະຫານກວດກາ ສະນັ້ນນາຍທະຫານຈຶ່ງອອກຄຳສັ່ງ ໃຫ້ຫງວຽນອາຍກວັກອອກຈາກຮົ່ງກົງພາຍໃນ ໒໔ ຊົ່ວໂມງ ອີງຕາມກົດໝາຍຂອງທ້ອງຖິ່ນ.

ຫງວຽນອາຍກວັກປ່ຽນລົດໄຟມຸ່ງໜ້າໄປຊຽງໄຮ້. ເມື່ອມາຮອດຊຽງໄຮ້ ເພິ່ນຖືກສັບຊ້ອນເຂົ້າໃນໝູ່ຊ່ຽວຊານໂຊວຽດທີ່ເຮັດວຽກຢູ່ຈີນ. ພວກເຂົາເຈົ້າ ເດີນທາງຜ່ານຈີນ ແລະ ດ້ວຍເສັ້ນທາງອັນຍາວໄກ ທັງລຳບາກພວກເຂົາໄດ້ເດີນຜ່ານທະເລ - ຊາຍໂກບີກັບຄືນຮອດປະເທດລັດເຊຍໂຊວຽດ. ການເດີນທາງໄກດັ່ງກ່າວນີ້ ໂບໂຣດິນກໍໄດ້ຜ່ານຜ່ານມາກ່ອນແລ້ວ.

ພວກປະຕິການເພີ່ມການປາບປາມຢ່າງຮ້າຍກາດຢູ່ທົ່ວກວາງເຈົາ. ໃນເບື້ອງຕົ້ນພວກເຂົາຍັງບໍ່ແຕະຕ້ອງຊາວຫວຽດນາມຕ່າງດ້າວ. ເຖິງແມ່ນວ່າ ຊຸດຮຽນ ການເມືອງໄດ້ອັດລົງແລ້ວກໍຕາມ ແຕ່ສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ກໍຍັງສືບຕໍ່ເຄື່ອນໄຫວຢູ່. ເຊັ່ນດຽວກັນກັບເມື່ອກ່ອນນີ້ ສະມາຊິກສະມາຄົມສ່ວນຫລາຍກໍຍັງ ຕິດຕາມຮຽນຢູ່ວິທະຍາຄານທະຫານ-ການເມືອງຮ່ວາງໂພ ທັງເຮັດວຽກ ຢູ່ອົງການຈັດຕັ້ງຕ່າງໆຂອງກົກມິນຕັງ ແລະ ທັງເຮັດວຽກໃນກອງທັບ.

ວັນທີ ໑໑ ເດືອນທັນວາ ປີ ໑໙໒໗, ຢູ່ກວາງເຈົາໄດ້ເກີດມີການລຸກຮື້ຂຶ້ນພາຍໃຕ້ການນຳພາຂອງບັນດານັກກອມມູນິດ. ການລຸກຮື້ຂຶ້ນຄັ້ງນີ້ໄດ້ຖືກບັນທຶກໄວ້ ຢູ່ໃນປະ

ຫວັດສາດການປະຕິວັດຈີນ ວ່າແມ່ນກອມມູນກວາງເຈົາ. ບັນດາຜູ້ທີ່ລຸກຮືຂຶ້ນ ໄດ້ສ້າງຕັ້ງສະພາລັດຖະມົນຕີປະຊາຊົນ ທີ່ປະກາດວ່າອຳນາດປົກຄອງທັງຫມົດຢູ່ກວາງຕຸ້ງ ຖືກມອບໃຫ້ສະພາໂຊວຽດຂອງຜູ້ແທນກຳມະກອນ, ຊາວນາ, ທະຫານ. ກອມມູນ ຄົງຕົວໄດ້ສາມວັນເທົ່ານັ້ນ. ກຳລັງຮ່ວມຂອງຈຽງໄຄເຊັກ, ພວກຂຸນເສິກອັງກິດ ແລະ ຍີ່ປຸ່ນໄດ້ດັບສູນກອມມູນໃຫ້ຈົມຢູ່ໃນທະເລເລືອດ. ພວກເຂົາໄດ້ຂ້າ ແລະ ທໍລະມານ ກຳມະກອນຕາຍເກືອບຫົກພັນຄົນ. ໃນມື້ດຽວກັນ ອິດທິກຳລັງປະຕິການກໍ່ເພີ່ມການ ປາບປາມຢ່າງໂຫດຫ້ຽມກວ່າເກົ່າ ຈົນຮອດພະນັກງານກົງສູນໂຊວຽດກໍ່ຕົກເປັນ ເຫຍື່ອສັງຫານ.

ບັນດານັກຮຽນຫວຽດນາມຈຳນວນຫນຶ່ງຈາກວິທະຍາຄານທະຫານ- ການເມືອງຮ່ວາງໂປ ໄດ້ເຂົ້າຮ່ວມການລຸກຮືຂຶ້ນ ແລະ ຕໍ່ສູ້ໂດຍຈັດວາງເຄື່ອງກັ້ນຂວາງທາງ, ພວກນັກສືບສອດແນມຂອງຈຽງໄຄເຊັກໄດ້ຕິດຕາມເບິ່ງສຳນັກງານຂອງສະມາຄົມ ຊາວຫນຸ່ມປະຕິວັດຫວຽດນາມ ມາເປັນເວລາດົນນານແລ້ວ, ມີເທື່ອຫນຶ່ງພວກເຂົາ ສັງເກດເຫັນຄົນຫວຽດນາມຕິດແຜແດງໃສ່ຫນ້າເອິກ (ເຄື່ອງຫມາຍຂອງຜູ້ທີ່ເຂົ້າຮ່ວມ ກອມມູນກວາງເຈົາ) ຢ່າງເຂົ້າໄປໃນສຳນັກງານຂອງສະມາຄົມ. ສະນັ້ນ ຫລັງຈາກ ທີ່ໄດ້ດັບສູນກອມມູນກວາງເຈົາແລ້ວ, ເຈົ້າຫນ້າທີ່ຕຳຫລວດກໍ່ໄດ້ເຂົ້າທຳລາຍສຳນັກງານ ຂອງສະມາຄົມ ແລະ ຈັບເອົາຄົນຫວຽດນາມທັງຫມົດທີ່ມີຫນ້າຢູ່ນັ້ນ. ໃນນັ້ນມີ "ຫລານ"ຮັກຂອງ ຫລີ ຊຸຍ ຄື ຫລີຕືຈອງ. ໃນເວລານັ້ນ ຫລີຕືຈອງ ຫລານເຍົາວະຊົນອາຍຸ ໑໓ປີໄດ້ສ້າງວິລະກຳຄັ້ງທຳອິດຂອງຕົນ, ເຖິງແມ່ນວ່າຖືກທຸບຕີ, ຂົ່ມຂູ່ກໍ່ຕາມ ແຕ່ຫລານກໍ່ບໍ່ເປີດເຜີຍຫຍັງ ແລະ ບໍ່ເປີດເຜີຍຊື່ໃຜຈັກຄົນໃຫ້ພວກເຈົ້າຫນ້າທີ່ຕຳຫລວດຮູ້.

ການກຳເນີດຂອງພັກ

໑

ຢູ່ພາກກາງຂອງປະເທດສະຫຍາມ (ເປັນຊື່ຂອງປະເທດໄທ ໃນສະໄໝນັ້ນ) ຢູ່ເທິງໂພນທີ່ຕັ້ງຢູ່ແຄມແມ່ນ້ຳເຈົ້າພະຍາ ມີບ້ານນ້ອຍໆແຫ່ງໜຶ່ງ. ບ້ານແຫ່ງນີ້ ມີປະມານຊາວຫລັງຄາເຮືອນທີ່ມຸງຫຍ້າ ປຸກຢັ່ງຢາຍຢູ່ໃນສວນກ້ວຍ ແລະ ຢູ່ຕາມຫວ່າງຕົ້ນຄໍ້ສວຍງາມ. ນັ້ນຄືບ້ານນ້ອຍໆຂອງຄົນຫວຽດນາມຕ່າງດ້າວ. ຕອນແລງໄທບ້ານທັງ ຜູ້ຊາຍ ຜູ້ຍິງ ແລະ ນ້ອງນ້ອຍໄປລວມຢູ່ທີ່ເດີ່ນໂຮງຮຽນຫລັງໜຶ່ງ. ຢູ່ຕາມຝາໂຮງຮຽນສົ້ນຝາຂ້າງໜຶ່ງແຂວນຮູບເຈົ້າຊີວິດສະຫຍາມ, ອີກຂ້າງໜຶ່ງແຂວນຮູບຟາມຮົ່ງຖາຍ . ຄົນຫວຽດນາມຕ່າງດ້າວທີ່ອາໄສຢູ່ນີ້ ແມ່ນຄົນຮັກຊາດຢ່າງແທ້ຈິງ ຍາມໃດພວກເຂົາ ກໍຄິດເຖິງປະເທດຊາດ. ພວກເຂົາເຈົ້ານັ່ງເປັນວົງມົນ ຮ້ອງເພງພື້ນເມືອງ ຫລືຟັງພວກຜູ້ເຖົ້າໝວດຂາວເລົ່າເລື່ອງບັ້ນສູ້ຮົບດຸເດືອດກັບພວກຝະລັ່ງ ຂອງ ຟານດິ່ງຟຸ່ງ ແລະ ຮ່ວາງຮວາຖາມ ກອງຫລອນຜູ້ພິລະອາດຫານ ຊຶ່ງເຄີຍເປັນຜູ້ບັນຊາການ ຂອງພວກຜູ້

ເຖົ້າ ຜູ້ອາວຸໂສເຫລົ່ານີ້ເມື່ອເກືອບເຄິ່ງສະຕະວັດກ່ອນ.

ແຕ່ບໍ່ນານມານີ້, ມີບຸກຄົນສຳຄັນ ທີ່ມາຮ່ວມວົງຊຸມນຸມອັນເປັນປະເພນີ ໃນຕອນກາງຄືນດັ່ງກ່າວ ແມ່ນຄົນແປກໜ້າທີ່ຫາກໍ່ມາຢູ່ໃໝ່. ບຸກຄົນດັ່ງກ່າວມາຈາກໃສ ບໍ່ມີໃຜຮູ້. ຟັງຕາມສຳນຽງກໍ່ຮູ້ວ່າ ບຸກຄົນດັ່ງກ່າວມີບ້ານເກີດເມືອງນອນຢູ່ພາກກາງຫວຽດນາມ. ອາຍຸກໍປະມານສີ່ສິບປີ, ແຕ່ເພື່ອສະແດງອອກເຖິງຄວາມນັບຖື ຕາມປະເພນີທ້ອງຖິ່ນ ທຸກຄົນໄດ້ເອີ້ນຊື່ເພິ່ນວ່າ "ເທົ່າຈິນ" (ຈິນທີ່ໜ້ານັບຖື). ເມື່ອຊາວບ້ານມານັ່ງຢູ່ເດີ່ນໂຮງຮຽນແລ້ວ ເທົ່າຈິນ ກໍຍ່າງເຂົ້າໄປໃນກາງວົງ ຈາກນັ້ນກໍອ່ານໜັງສືພິມ ຫລືບໍ່ກໍເລົ່າກາບກອນໂບຮານໃຫ້ທຸກຄົນຟັງຢ່າງຊ້າໆ ແລະ ມີກົກມີປາຍ.ເມື່ອອ່ານຈົບລົງ ເທົ່າຈິນ ກໍຕອບຄຳຖາມທີ່ພໍ່ລຸງ ແມ່ປ້າຍົກຂຶ້ນ. ໃຜໆກໍມີຄວາມຮູ້ສຶກວ່າ ເທົ່າຈິນ ຮູ້ຈັກທຸກສິ່ງທຸກຢ່າງ: ສະພາບການພາຍໃນປະເທດເປັນຄືແນວໃດ ແລະ ມີເຫດການຫຍັງແດ່ ກຳລັງເກີດຂຶ້ນຢູ່ໃນໂລກ.

ເມື່ອຄາວຍັງຢູ່ທີ່ ກວາງຕຸ້ງ ຫງວຽນອາຍກ໊ວກ (ຄົນດຽວກັບ ເທົ່າຈິນ)ໄດ້ມີຄວາມຕັ້ງໃຈຢາກຈັດຕັ້ງວຽກງານການເມືອງຂຶ້ນໃນໝູ່ຊາວຫວຽດນາມຕ່າງດ້າວຢູ່ສະຫຍາມ. ຕາມຫົວຄິດລິເລີ່ມຂອງ ຫງວຽນອາຍກ໊ວກ,ສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ໄດ້ສົ່ງຜູ້ຕາງໜ້າ ປຶ້ມອ່ານ ໜັງສືພິມ ແລະ ເອກະສານຕ່າງໆຢ່າງລຽນຕິດໄປຍັງເຂດພາກຕາເວັນອອກສຽງເໜືອ ຂອງສະຫຍາມ. ໃນເວລານັ້ນ ຈຳນວນຫວຽດນາມຕ່າງດ້າວຢູ່ນີ້ໄດ້ເພີ່ມຂຶ້ນເກືອບຊາວພັນຄົນ. ໃນຈຳນວນນັ້ນ ມີບາງຄົນໄດ້ມາຢູ່ແຕ່ດົນແລ້ວ, ພວກເຂົາເຈົ້າແມ່ນລູກຫລານຄົນຫວຽດນາມຜູ້ທຳອິດ ທີ່ນັບຖືສາດສະໜາເຍຊູ. ເລີ່ມແຕ່ຕົ້ນສະຕະວັດທີ I9, ພວກເຂົາເຈົ້າຖືກພະເຈົ້າຊີວິດ ມິນມາງ ແລະຕຶດຶກ ສົງໄສວ່າເປັນລູກມືຂອງພວກຜິວຂາວຈາກແດນໄກແສນໄກ ສະນັ້ນພວກເຂົາເຈົ້າຈຶ່ງຈຳເປັນຕ້ອງໄດ້ພັດພາກຈາກບ້ານເກີດເມືອງນອນມາອາໄສຢູ່ນີ້. ຄົນຫວຽດນາມຕ່າງດ້າວສ່ວນໃຫຍ່ມາຢູ່ບ່ອນນີ້ ໃນໄລຍະຊຸມປີແຫ່ງສົງຄາມໂລກຄັ້ງທີໜຶ່ງ ເພື່ອຫລົບຫລີກ ຈາກການໄປເປັນທະຫານຂອງຝະລັ່ງ ແລະ ພ່າຍໜີຈາກຄວາມອຶດຫິວ. ແຕ່ກໍຍັງມີຄົນ ຈຳນວນໜຶ່ງທີ່ຫາກໍມາຢູ່ໃໝ່. ພວກເຂົາເຈົ້າໄດ້ເຂົ້າຮ່ວມໃນບັນດາຂະບວນການຮັກຊາດ ແລະ ລອດຊີວິດຈາກການປາບປາມຂອງພວກລ່າເມືອງຂຶ້ນຝະລັ່ງ. ຄົນຈຳພວກນີ້ ຢາກກັບຄືນຫາປະເທດຊາດຫລາຍກວ່າສິ່ງອື່ນ. ພວກເຂົາເຈົ້າຖືວ່າ ສະຫຍາມແມ່ນສະຖານທີ່ອາໄສຊົ່ວຄາວ, ດັ່ງນັ້ນຈຶ່ງບໍ່ຄິດເຖິງການເຄື່ອນໄຫວປະຕິວັດອັນໃດຫຍັງໝົດ ໃນໝູ່

ຊາວຫວຽດນາມຕ່າງດ້າວ. ມິແຕ່ຫລັງຈາກທີ່ສະມາຄົມຊາວໜຸ່ມປະຕິວັດ ຫວຽດນາມເກີດຂຶ້ນ ຂ່າວຄາວກ່ຽວກັບບັນດາເຫດການທີ່ເກີດຂຶ້ນຢູ່ພາຍໃນປະເທດ ກໍດີຢູ່ພາກໃຕ້ຈີນ ຈຶ່ງເລີ່ມແຜ່ລາມມາຮອດບ້ານຊາວຫວຽດນາມຕ່າງດ້າວແຫ່ງນັ້ນເທື່ອລະນ້ອຍ. ໃນປີ ໑໙໒໖ ຫົວຈັກຫລັກແຫລ່ງຂອງສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ໄດ້ຈັດຕັ້ງສະມາຄົມຄົນຫວຽດນາມຜູ້ລີ້ໄພທີ່ມີຊື່ວ່າ "ມິດຕະພາບ" ຂຶ້ນຢູ່ ສະຫຍາມ. ຕໍ່ມາບໍ່ດົນ,ສະມາຄົມດັ່ງກ່າວກໍ່ມີສາຂາຕັ້ງຢູ່ແຂວງ ອຸດອນ ໜອງຄາຍ ສາກົນນະຄອນ ນະຄອນພະນົມ ມຸກດາຫານ.

ນັບຕັ້ງແຕ່ເດືອນເມສາປີ ໑໙໒໗ ພຸ້ນ ເມື່ອຮູ້ແຈ້ງວ່າ ບໍ່ສາມາດເຄື່ອນໄຫວ ຢູ່ຈີນໄດ້ອີກ, ຫງວຽນອາຍກວັກ ຈຶ່ງຄິດຢາກຈະຍ້າຍໄປຢູ່ ສະຫຍາມ.

ເມື່ອໄດ້ຟັງຈາກການເລົ່າເລື່ອງຂອງບັນດາສະມາຊິກສະມາຄົມຊາວໜຸ່ມ ປະຕິວັດຫວຽດນາມທີ່ມາຈາກສະຫຍາມ, ຫງວຽນອາຍກວັກ ກໍຮູ້ໄດ້ໂລດວ່າຢູ່ນີ້ ມີຂອບເຂດອ່າວກວ້າງແດ່ສຳລັບວຽກງານໂຄສະນາ ຢູ່ໃນໝູ່ຊາວຫວຽດນາມຕ່າງດ້າວ, ຍິ່ງກວ່ານັ້ນ ອຳນາດການປົກຄອງສະຫຍາມ ຈະບໍ່ສ້າງອຸປະສັກຫຍັງພິເສດ ສຳລັບນັກປະຕິວັດຫວຽດນາມ.

ຫງວຽນອາຍກວັກ ໄດ້ອາໄສຢູ່ມົດສະກູ ບໍ່ດົນປານໃດ. ເດືອນທັນວາປີ ໑໙໒໗ ເພິ່ນໄປນະຄອນຫລວງ ບຣູກແຊນ ເພື່ອເຂົ້າຮ່ວມສະໄໝປະຊຸມຂອງສະມັດຊາໃຫຍ່ສັນນິບາດ ຕ້ານຈັກກະພັດ. ສັນນິບາດນີ້ສ້າງຕັ້ງຂຶ້ນເມື່ອເດືອນກຸມພາ ປີ ໑໙໒໗ ຢູ່ທີ່ກອງປະຊຸມໃຫຍ່ສາກົນ. ນີ້ແມ່ນອົງການຈັດຕັ້ງຕ້ານຈັກກະພັດຢ່າງກວ້າງຂວາງອົງການ ທຳອິດ ທີ່ເປັນຕົວແທນໃຫ້ແກ່ແນວໂຮມເອກະພາບຂອງຊົນຊັ້ນກຳມະກອນສາກົນ ຂອງປັນຍາຊົນຜູ້ກ້າວໜ້າຢູ່ບັນດາປະເທດນາຍທຶນ ແລະຜູ້ຕາງໜ້າຂອງບັນດາປະຊາຊາດເມືອງຂຶ້ນ ແລະ ບັນດາປະເທດທີ່ບໍ່ມີເອກະລາດຢູ່ທະວີບອາຊີ, ອາຟະລິກາ,ອາເມລິກາ ລາຕິນ. ນາງຕົງແຂ້ງລິນ (ພັນລະຍາໝ້າຍຂອງ ຊຸນ ຢັດເຊັນ), ອານແບ ແອັງສະແຕັງ, ໂຣແມັງ ໂຣລັງ, ຊາວາຄາວະລານ ເນຣູ, ເຊັນ ກາຕາຢາມາ,ອັງຣີ ບາກບຸສ ແລະ ບັນດານັກເຄື່ອນໄຫວຜູ້ສຳຄັນອື່ນໆກໍໄດ້ເຂົ້າຮ່ວມໃນອົງການຈັດຕັ້ງນີ້.

ພາຍຫລັງສະໄໝປະຊຸມປິດລົງ, ຫງວຽນອາຍກວັກ ອອກເດີນທາງ ໄປຢ້ຽມຢາມຝະລັ່ງ, ປະເທດສະວິດ, ອີຕາລີ ແລ້ວຂຶ້ນກຳປັ່ນຂອງຍີ່ປຸ່ນຈາກ ເນອາປອນ ໄປຫາສະຫຍາມ ທີ່ໄກແສນໄກ.

ໃນຊຸມປີດັ່ງກ່າວ ແຂວງອຸດອນແມ່ນໃຈກາງຂອງຊາວຫວຽດນາມຕ່າງດ້າວຢູ່ສະຫຍາມ. ຢູ່ແຫ່ງນີ້, ສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ໄດ້ສ້າງຕັ້ງອົງການຈັດຕັ້ງຮາກຖານອັນກວ້າງໃຫຍ່. ນັບແຕ່ມື້ທຳອິດ ທີ່ມາຢູ່ສະຫຍາມໃໝ່ໆ, ຫງວຽນອາຍກວັກ ໄດ້ຮັບຮູ້ວ່າ ການເຄື່ອນໄຫວຂອງອົງການຈັດຕັ້ງນີ້ບໍ່ດີປານໃດ: ຫົວຈັກຫລັກແຫລ່ງ ມັກເບິ່ງບັນຫາ ແຕ່ໃນທາງຮ້າຍ, ຍິ່ງໄປກວ່ານັ້ນ ການປາບປາມ ບັນດາຂະບວນການຮັກຊາດຢູ່ຫວຽດນາມ ຢ່າງສາຫັດ ແຮ່ງເພີ່ມແນວຄິດທຸກຂະທັດນິຍົມ ຂອງພວກເຂົາຫລາຍຂຶ້ນ.

ເຖິງແມ່ນວ່າສະມາຊິກສະມາຄົມຊາວໜຸ່ມປະຕິວັດຫວຽດນາມຈຳນວນໜຶ່ງ ໄດ້ມາອາໄສຢູ່ສະຫຍາມດົນແລ້ວກໍຕາມ ແຕ່ພວກເຂົາເຈົ້າບໍ່ຢາກຕິດພັນ ກັບປະຊາຊົນທ້ອງຖິ່ນ, ຍິ່ງກວ່ານັ້ນຍັງບໍ່ຮູ້ພາສາສະຫຍາມ, ບໍ່ຮູ້ຮີດຄອງປະເພນີຂອງຄົນສະຫຍາມອີກຊ້ຳ. ຢູ່ໃນການປະຊຸມຄັ້ງທຳອິດ ຫງວຽນອາຍກວັກ ໄດ້ຕຳໜິຢ່າງເຄັ່ງຂຶມ ຕໍ່ຄວາມບົກພ່ອງດັ່ງກ່າວ ແລະ ຍັງໄດ້ຮຽກຮ້ອງໃຫ້ຊອກຫາວິທີຂະຫຍາຍ ແລະ ປັບປຸງຖັນແຖວສະມາຄົມ "ມິດຕະພາບ" ກໍ່ສ້າງພະນັກງານປະຕິວັດໃນອະນາຄົດ ຢູ່ກະໂຕແຜ່ນດິນສະຫຍາມ ເພື່ອວ່າໃນຍາມຈຳເປັນພວກເຂົາເຈົ້າອາດຈະກັບຄືນປະເທດ. ຂະນະດຽວກັນ, ຫງວຽນອາຍກວັກ ຍັງໄດ້ສະເໜີໃຫ້ທຸກຄົນບໍ່ລືມອົບຮົມການເມືອງໃຫ້ແກ່ປະຊາຊົນທ້ອງຖິ່ນເພື່ອໃຫ້ຊາວຜູ້ອອກແຮງງານສະຫຍາມ ມີຄວາມຮູ້ສຶກເປັນໃຈກັບການຕໍ່ສູ້ ຂອງປະຊາຊົນຫວຽດນາມ ຕ້ານລະບອບລ່າເມືອງຂຶ້ນ.

ມີເທື່ອໜຶ່ງ, ຫລັງຈາກເລີກປະຊຸມ, ສະຫາຍຄົນໜຶ່ງຈົ່ມວ່າ ເຮັດວຽກປະຕິວັດຢູ່ໃນໝູ່ຊາວຫວຽດນາມຕ່າງດ້າວບໍ່ມີຫວັງຫຍັງໝົດ:

"ຂ້ອຍຫາກໍມາແຕ່ເຮືອນຄົນຫວຽດນາມຕ່າງດ້າວ ຢູ່ມຸກດາຫານ. ຢູ່ພຸ້ນມີ ປະມານສາມສິບຄອບຄົວ. ຢູ່ຕະຫລາດພວກແມ່ຍິງມີຊື່ສຽງທາງດ້ານການປ່ອຍດ້າກັນເກັ່ງ. ພວກຜູ້ຊາຍກັບຈາກວຽກງານມາ ຕອນແລງເບິ່ງຄົນໃດກໍ່ດື່ມເຫລົ້າເມົາປ່ອຍຕົວເປື້ອນຄີໂຕໝູ, ຊວນກັນໄປຈູ້ມຫົວກັນຫລິ້ນໄພ້, ຕໍ່ຈາກນັ້ນພວກເຂົາເຈົ້າກໍ່ພາກັນໄປລ້າງບາບຢູ່ວັດ ຊື່ວ່າ ຈານ. ຊາວໜຸ່ມກໍເຊັ່ນດຽວກັນ ກັບພວກຜູ້ໃຫຍ່ ພວກເຂົາມັກຫລິ້ນການພະນັນ, ນອກຈາກນັ້ນກໍຕິດເຫລົ້າຕິດສາວ. ຢູ່ໃນໝູ່ປະຊາຊົນທີ່ມີສະພາບຄືແນວນີ້ ຈະດຳເນີນການໂຄສະນາປະຕິວັດໄດ້ແນວໃດ ! ຂ້ອຍຂໍປ່ຽນໄປເຮັດວຽກແນວອື່ນ ອັນໃດອັນໜຶ່ງ."

ຫວງວຽນອາຍກວັກ ຕອບດ້ວຍຄວາມບໍ່ພໍໃຈວ່າ:

"ເບິ່ງລວມໆແລ້ວສະຫາຍຄືຈັ່ງວ່າ ເຄີຍອ່ານປຶ້ມ ແຕ່ຫາກລືມໝົດແລ້ວວ່າ ຢູ່ໃນປຶ້ມໄດ້ຂຽນຫຍັງໄວ້ແດ່. ພວກເຮົາເປັນນັກປະຕິວັດ ສະນັ້ນຈຶ່ງຕ້ອງໄປຫາມະຫາຊົນ ໄປຢູ່ໃນໝູ່ເຂົາເຈົ້າ, ປຸກລູກໃຫ້ເຂົາເຈົ້າຕື່ນຕົວ ແລະ ດຶງດູດເຂົາເຈົ້າໄປຫາ ການປະຕິວັດ. ຖ້າວ່າໃຜກໍເກີດມາດີເລີດໝົດແລ້ວ, ໄດ້ຮັບການສຶກສາແລ້ວ, ຕື່ນຕົວເອົາເອງ, ໃນກໍລະນີນັ້ນບໍ່ຈຳເປັນມີນັກຂົນຂວາຍການເມືອງຜູ້ໃດເລີຍ. ນອກຈາກນັ້ນ ສະຫາຍລືມໄປວ່າ ຄົນ "ຊົ່ວຊ້າ" ເຫຼົ່ານັ້ນ ແມ່ນເພື່ອນຮ່ວມຊາດຂອງພວກເຮົາ ທີ່ໄດ້ຮັບຄວາມເດືອດຮ້ອນຍ້ອນພວກເຂົາເຈົ້າຕ້ອງດຳລົງຊີວິດຢູ່ຕ່າງປະເທດແມ່ນບໍ່ສະຫາຍ? ສະນັ້ນ ໃຫ້ສະຫາຍກັບຄືນບ່ອນເກົ່າສືບຕໍ່ເຮັດວຽກ. ສະຫາຍຈົ່ງຊອກເອົາຄອບຄົວທີ່ປຸກລະດົມຍາກທີ່ສຸດ, ໄປອາໄສຢູ່ນຳເຂົາເຈົ້າ, ເຮັດໃຫ້ເຂົາເຈົ້າຮັກແພງສະຫາຍຄືກັນກັບອ້າຍນ້ອງ ແລະ ເຊື່ອໝັ້ນໃນການປະຕິວັດຂອງພວກເຮົາ ເຮັດແນວນີ້ ສະຫາຍຈິ່ງຫລ້ອນໜ້າທີ່ຂອງນັກປະຕິວັດ."

ຂອບເຂດເຄື່ອນໄຫວ ຂອງຫວງວຽນອາຍກວັກ ແມ່ນກວ້າງໃຫຍ່ທີ່ສຸດ. ເພິ່ນຈັດທຳໜັງສືພິມຂອງສະມາຄົມຄື "ມິດຕະພາບ" ໄດ້ອອກຈຳໜ່າຍເປັນປົກກະຕິ. ເພິ່ນຊອກຊ່ອງທາງເຮັດແນວໃດໃຫ້ຍົກຈຳນວນພິມຂຶ້ນໃຫ້ໄດ້ຫລາຍ. ເພິ່ນຍັງປຸກລະດົມ ອຳນາດປົກຄອງຂອງສະຫຍາມ ໃຫ້ອະນຸຍາດເປີດໂຮງຮຽນສອນລູກຫລານຂອງຊາວຫວຽດນາມຕ່າງດ້າວເປັນພາສາຫວຽດນາມ. ໂຮງຮຽນຫລັງທຳອິດຢູ່ປະເທດນີ້ໄດ້ຖືກສ້າງຕັ້ງຂຶ້ນຢູ່ ອຸດອນ. ຊາວຫວຽດນາມຕ່າງດ້າວຢູ່ນີ້ຮ່ວມແຮງກັນປຸກສ້າງໂຮງຮຽນ. ເພິ່ນເອງກໍໄດ້ປະກອບສ່ວນອອກແຮງງານຮ່ວມກັບບັນດາສະມາຊິກສະມາຄົມຊາວໜຸ່ມ ປະຕິວັດຫວຽດນາມ ເຊັ່ນ ຫາບດິນຈີ່ ແລະ ອື່ນໆໃນການປຸກສ້າງໂຮງຮຽນໃຫ້ພວກນ້ອງນ້ອຍ.

ຫວງວຽນອາຍກວັກ ບໍ່ມັກຢູ່ບ່ອນເກົ່າ, ໃນຮອບໜຶ່ງປີ ເພິ່ນໄດ້ໄປທົ່ວທຸກແຫ່ງຢູ່ເຂດຕາເວັນອອກສຽງເໜືອຂອງສະຫຍາມ.ແຕ່ລະເທື່ອທີ່ອອກເດີນທາງໄກ ເພິ່ນແລະບັນດາເພື່ອນຮ່ວມເດີນທາງຫາບກະຕ່າຫວາຍ ສອງໜ່ວຍທີ່ບັນຈຸໂສ້ງເສື້ອ, ອາຫານການກິນຄົບໃຫ້ກຸ້ມພາຍໃນສິບວັນ. ເມື່ອເຂົ້າປ່າ ຫລືພໍ້ໂງ່ນຫີນກໍຫາບກະຖຸງ ໄກວໂຕ່ງເລ່ງໆ ຜູ້ຫາບກໍເຊຊຸກເຊຊ້າຍຕາມຈັງຫວະຖືກບາດຕີນ. ໃນທີ່ສຸດ ເພິ່ນກໍຍ່າງ ເກັ່ງໂພດປານຫຍັງ. ມີຄົນເລົ່າໃຫ້ຟັງວ່າ ແຕ່ອຸດອນ ໄປຫາ ສະຫວ່າງ ມີໄລຍະທາງ ໄກ ໗໐ ກິໂລແມັດ ແຕ່ຫວງວຽນອາຍກວັກ ຈະໃຊ້ເວລາຍ່າງທັງໝົດໜຶ່ງມື້ໜຶ່ງຄືນເທົ່ານັ້ນ.

ສິລະປະໃນການຍ່າງໄລຍະທາງໄກເປັນປະໂຫຍດໃຫ້ແກ່ ຫວຽນອາຍກວັກທີ່ສຸດ. ພາຍລູນມາ ເມື່ອກັບມາເຄື່ອນໄຫວຢູ່ພາຍໃນປະເທດ ໂດຍສະເພາະໃນຊຸມປີຕໍ່ຕ້ານ ຝະລັ່ງ ຄວາມສາມາດໃນການຍ່າງຊ່ວຍໃຫ້ ຫວຽນອາຍກວັກ ຫລຸດພົ້ນອອກຈາກສະພາບ ອັນຕະລາຍທີ່ສຸດໄປໄດ້ຫລາຍເທື່ອ.

ແຕ່ຊູດອນ ໄປຫວຽດນາມບໍ່ໄກປານໃດ, ແຕ່ຂ່າວຄາວທີ່ມາຈາກຫວຽດນາມ ມີຫນ້ອຍທີ່ສຸດ ແລະ ບໍ່ລຽນຕິດ. ຫວຽນອາຍກວັກ ໄດ້ຮັບຂ່າວສ່ວນຫລາຍແມ່ນມາຈາກຜູ້ຕິດຕໍ່ຂອງສະມາຄົມຊາວຫນຸ່ມປະຕິວັດຫວຽດນາມຜູ້ທ່ຽວໄປທ່ຽວມາລະຫວ່າງ ປະເທດຊາດກັບບ່ອນອາໄສຂອງຊາວຫວຽດນາມຕ່າງດ້າວຢູ່ພາກໃຕ້ຈີນ ແລະ ສະຫຍາມ. ຂ່າວຄາວທີ່ໄດ້ຮັບນີ້ ທັງເຮັດໃຫ້ຫວຽນອາຍກວັກ ດີໃຈ ທັງກັງວົນຫ່ວງໄຍ. ຢູ່ພາຍໃນປະເທດ, ອີງຕາມການສັງເກດຂອງເພິ່ນ, ຂະບວນວິວັດແຫ່ງການເປັນຮູບເປັນຮ່າງຂອງຂະບວນການກອມມູນິດດຳເນີນໄປຢ່າງວ່ອງໄວທີ່ສຸດ. ໃນທ້າຍຊຸມປີ ໒໐ ການເຄື່ອນໄຫວຂອງສະມາຄົມຊາວຫນຸ່ມປະຕິວັດຫວຽດນາມ ສ່ວນໃຫຍ່ແມ່ນຍົກຍ້າຍໄປຢູ່ ພາຍໃນປະເທດ ອັນໄດ້ສ້າງເງື່ອນໄຂສະດວກໃຫ້ແກ່ການເຜີຍແຜ່ແນວຄິດຂອງລັດທິມາກ- ເລນິນ ຊຶ່ງນັບວັນນັບກວ້າງເລິກ ຢູ່ພາຍໃນວົງການຮັກຊາດ, ໂດຍສະເພາະແມ່ນຢູ່ ໃນຊາວຫນຸ່ມ. ຂະບວນການກຳມະກອນຂະຫຍາຍຕົວຢ່າງແຂງແຮງ. ສະຕິຕື່ນຕົວ ດ້ານການເມືອງຂອງກຳມະກອນນັບວັນສູງຂຶ້ນ. ບັນດາຫນ່ວຍໃຕ້ດິນຂອງນັກກອມມູນິດ ໄດ້ເລີ່ມປະກົດຕົວຂຶ້ນຢູ່ໃນໂຮງງານອຸດສາຫະກຳທີ່ຕັ້ງຢູ່ຕົວເມືອງໃຫຍ່ໆ. ໃນຕອນກາງປີ ໑໙໒໙, ບັນດາຫນ່ວຍເຫລົ່ານີ້ໄດ້ເຕົ້າໂຮມກັນເຂົ້າເປັນສາມອົງການຈັດຕັ້ງ ທີ່ບໍ່ຂຶ້ນ ຕໍ່ກັນ. ຢູ່ບັກກີ່ ແມ່ນພັກກອມມູນິດອິນດູຈີນ, ຢູ່ນາມກີ່ ແມ່ນພັກກອມມູນິດອານນາມ; ຢູ່ຈູງກີ່ ແມ່ນສະຫະພັນກອມມູນິດອິນດູຈີນ. ພໍແຕ່ເລີ່ມສ້າງຕັ້ງ ສາມພັກດັ່ງກ່າວກໍເລີ່ມຜິດຖຽງກັນໂລດ ເພາະວ່າແຕ່ລະອົງການຈັດຕັ້ງລ້ວນແຕ່ມີຄວາມປາດຖະຫນາຢາກຈະມີບົດບາດເປັນພັກກອມມູນິດພັກດຽວຢູ່ພາຍໃນປະເທດ. ການປະທະກັນຢ່າງຮຸນແຮງ ເປັນພິເສດໄດ້ລະເບີດຂຶ້ນລະຫວ່າງສອງອົງຄະນະພັກຢູ່ ບັກກີ່ ແລະ ນາມກີ່. ຢູ່ໃນບາງໂຮງງານໃນເວລາດຽວກັນໄດ້ມີຫນ່ວຍພັກຂອງທັງສອງພັກ. ບັນດາອົງການຈັດຕັ້ງ ຕັ້ງຫນ້າໂຈມຕີກັນ ແລະ ຜິດຖຽງກັນ ໃນບາງບັນຫາທີ່ບໍ່ເປັນຫລັກການ. ການພົວພັນກັນແບບບໍ່ສະຫນິດສະຫນົມລະຫວ່າງພັກ ຊ້ຳຍັງບໍ່ມີໂຄງການດຳເນີນງານທີ່ເປັນເອກະພາບກັນໄດ້ເຮັດໃຫ້ບັນດາພັກລົດຄວາມສາມາດສູ້ຮົບ ແລະ ຂັດຂວາງບໍ່ໃຫ້ວຽກງານຂົນຂວາຍ ມະ

ຫາຊຶມມີຜົນສຳເລັດ.

ວັນໜຶ່ງ ຕົ້ນເດືອນທັນວາ ປີ ໑໙໔໙ ຜູ້ຕິດຕໍ່ໄດ້ມາພົບ ຫວຽນອາຍກວັກແລະບອກວ່າ ໂຮຕຽງເມົາ ແລະ ເລຮົ່ງເຊີນ ເຊິ່ງຢູ່ຮົ່ງກົງ ຝາກຄວາມຢ້ຽມຢາມຖາມຂ່າວເພິ່ນ. ຜູ້ຕິດຕໍ່ຍັງລາຍງານອີກຕື່ມວ່າ:

"ພວກສະຫາຍເຫລົ່ານັ້ນ ຂໍໃຫ້ຂ້າພະເຈົ້າແຈ້ງໃຫ້ພວກສະຫາຍຊາບວ່າສະພາບການໃນປະຈຸບັນເຄັ່ງຕຶງທີ່ສຸດ. ເຖິງແມ່ນວ່າຈະໄດ້ຮັບຂ່າວວ່າ ຢູ່ທົ່ວພູກແຫ່ງ ພາຍໃນປະເທດ ລ້ວນແຕ່ມີພັກກອມມູນິດທົ່ມທາອຽງທີ່ສະແດງອອກເຖິງ ຄວາມມຸ່ງມາດປາດຖະໜາຢາກສ້າງຕັ້ງພັກເອກະພາບຂຶ້ນໃນໄວໆນີ້, ແຕ່ບັນດາຜູ້ນຳຂອງອົງຄະນະພັກຢູ່ບັກກິ່ ແລະ ນານກິ່ ກໍ່ຜິດຂ້ອງຕ້ອງຖຽງກັນຢ່າງເຜັດຮ້ອນ ຈົນເຖິງຂັ້ນວ່າບໍ່ມີໃຜຟັງໃຜ. ມີຜູ້ສົ່ງຂ່າວມາວ່າ ໃນປະຈຸບັນຈະມີແຕ່ຄົນດຽວເທົ່ານັ້ນ ທີ່ມີອິດທິພົນຕໍ່ເຂົາເຈົ້າ ຄືນຜູ້ນັ້ນແມ່ນສະຫາຍເວືອງ ຜູ້ຕາງໜ້າສາກົນກອມມູນິດ. ບັນດາສະຫາຍຢູ່ຄະນະເລຂາ ພາກຕາວັນອອກໄກຂອງຄະນະບໍລິຫານງານສາກົນກອມມູນິດ ມີຄວາມເປັນຫ່ວງເປັນໃຍທີ່ສຸດກ່ຽວກັບສະຖານະການນີ້ ແລະ ທັງໄດ້ແນະນຳວ່າ ຄວນຈະດຳເນີນມາດຕະການເພື່ອກຳຈັດຄວາມບໍ່ລົງລອຍກັນລະຫວ່າງບັນດາອົງການຈັດຕັ້ງກອມມູນິດຢູ່ຫວຽດນາມ".

ຫວຽນອາຍກວັກ ກຽມອອກເດີນທາງໃນທັນທີໂລດ. ເພິ່ນໄປຂຶ້ນລົດໄຟ ເດີນທາງເຂົ້າບາງກອກ, ແຕ່ບາງກອກລົງກຳປັ່ນໄປສິງກະໂປ, ຢູ່ແຫ່ງນີ້ເພິ່ນໄດ້ປ່ຽນ ກຳປັ່ນເດີນທາງໄປ ຮົ່ງກົງ.

໔

ຮົ່ງກົງ, "ອ່າວຫອມຫວນ" ເປັນຊຸທີ່ຄົ້ນພົບເມືອງສະໄໝບູຮານເອີ້ນຊຸດນຄອນຕອນຫຍ້າອັນສວຍງາມແຜ່ນນີ້, ໄດ້ປະກົດຕົວຂຶ້ນຕໍ່ໜ້າຫວຽນອາຍກວັກ ໃນເວລາ ບໍ່ຊ້າ.

ກຳປັ່ນແລ່ນຊ້າໆເຂົ້າສູ່ປາກອ່າວທີ່ກວ້າງໃຫຍ່ໄພສານ ແລະ ຫ້ອມລ້ອມດ້ວຍພູບໍ່ສູງ ປະກົດເປັນຄີສີທອງຍ້ອນແສງຕາເວັນຍາມຮຸ່ງອາລຸນ. ຢູ່ຕີນພູບັນດາເຮືອນຕຶກເຮືອນກໍ່, ຝາເຮືອນທາສີຂາວບໍລິສຸດຈົ່ມກັນຕາມລວງຍາວຂອງເສັ້ນທາງທີ່ເນີ້ງ ຍາວຢຽດ

ຕາມແຄມຝັ່ງທະເລ. ຢູ່ທ່າເຮືອ ກຳປັ່ນທີ່ມາຈາກທຸກມູມໂລກກຳລັງເຂົ້າທຽບທ່າ. ສ່ວນເຮືອສຳເພົາແລ່ນລີ້ວໆເຂົ້າຫວ່າງກາງຝູງກຳປັ່ນເດີນທະເລ.

ເຂດທີ່ຖືກເອີ້ນວ່າ ຮົ່ງກົງ ແມ່ນເກາະຮົ່ງກົງ ຊຶ່ງເປັນເກາະໜຶ່ງ ບໍ່ໃຫຍ່ປານໃດ ແລະ ພາກໃຕ້ສຸດຂອງແຫລມເກົາລູນ ອັນທີ່ເອີ້ນວ່າ ດິນແດນໃໝ່ຊຶ່ງຈີນໄດ້ໃຫ້ຄົນອັງກິດເຊົ່າ ຈີນຮອດປີ ໑໙໙໗, ນອກນັ້ນ ຍັງມີເກາະນ້ອຍໆ ແຫ່ງທີ່ຢູ່ຕິດກັບແຫລມເກົາລູນ. ໃນຊຸມປີດັ່ງກ່າວ ຮົ່ງກົງ ຖືວ່າແມ່ນ "ເມືອງເປີດ". ເຈົ້າໜ້າທີ່ອັງກິດອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ຢາກຈະມາດອນແຫ່ງນີ້. ຢູ່ຮົ່ງກົງ ບັນດາອົງການຈັດຕັ້ງປະຊາທິປະໄຕອາດຄົງຕົວໄດ້ຢ່າງເສລີພໍສົມຄວນ ແລະ ຈຳພວກຄົນ ທີ່ເປັນຄົນຊົນຊາດແຕກຕ່າງກັນ ເຊິ່ງຖືກອຳນາດປົກຄອງປະເທດພວກເຂົາເຈົ້າປາບປາມຍ້ອນການເຄື່ອນໄຫວປະຕິວັດ ອາດມາຕັ້ງພູມລຳເນົາໄດ້, ໃນຕົວຈິງລະຫວ່າງຮົ່ງກົງ ກັບແຂວງກວາງຕຸ້ງຍັງບໍ່ມີເສັ້ນຊາຍແດນຢ່າງຈະແຈ້ງເທື່ອ. ໂດຍປະຕິບັດຕາມນະໂຍບາຍດີແນວນີ້ ຈັກກະພັດອັງກິດແມ່ນຢາກຈະສະແຫວງຫາຜົນປະໂຫຍດດ້ວຍການຍຸແຍ່ໃຫ້ເກີດ ມີການຕໍ່ສູ້ດ້ານການເມືອງຢູ່ຈີນ ແລະ ຢູ່ບັນດາເມືອງອື່ນຂອງຈັກກະພັດຝະລັ່ງ ຜູ້ເປັນຄູ່ແຂ່ງ ອັນສຳຄັນຂອງອັງກິດ ຢູ່ໃນຂົງເຂດນີ້.

ໂຮ່ຕຸ່ງເມົາ ແລະ ເລຮົ່ງເຊີນ ຜູ້ເປັນເພື່ອນເກົ່າຂອງ ຫງວຽນ ໄດ້ອອກ ໄປຮັບເພິ່ນຢູ່ທ່າເຮືອ. ນັບແຕ່ເດືອນທັນວາ ປີ ໑໙໒໗ ມາເຖິງດຽວນີ້ ພວກເຂົາເຈົ້າຍັງບໍ່ທັນພົບກັນເທື່ອ. ກ່ອນອື່ນໝົດ ໂຮ່ຕຸ່ງເມົາ ແລະ ເລຮົ່ງເຊີນໄດ້ເອົາຈົດໝາຍຂອງຄະນະບໍລິຫານງານສາກົນກອມມູນິດ ຊຶ່ງຈະສົ່ງໄປຍັງອົງການຈັດຕັ້ງກອມມູນິດຢູ່ອິນດູຈີນນັ້ນໃຫ້ ຫງວຽນອາຍກວັກ ອ່ານ. ໃນຈົດໝາຍມີຕອນໜຶ່ງຂຽນວ່າ: "ການທີ່ບໍ່ມີ ພັກກອມມູນິດເອກະພາບພັກໜຶ່ງ ໃນເວລາທີ່ຂະບວນການກຳມະກອນຊາວນາຂຶ້ນສູ່ ລະດັບສູງນັ້ນ ຖືວ່າເປັນໄພອັນຕະລາຍໃຫຍ່ໃຫ້ແກ່ການປະຕິວັດຢູ່ອິນດູຈີນໃນຕໍ່ໜ້າ. ຄວາມລັ່ງເລໃຈຂອງຄົນບາງກຸ່ມກ່ຽວກັບການສ້າງຕັ້ງພັກກອມມູນິດຂຶ້ນໃນທັນທີທັນໃດນັ້ນ ຖືວ່າເປັນຄວາມຜິດພາດອັນໜຶ່ງ...ໜ້າທີ່ສຳຄັນທີ່ສຸດ ແລະ ຮີບດ່ວນທີ່ສຸດຂອງບັນດາຊາວກອມມູນິດອິນດູຈີນທັງໝົດໃນເວລານີ້ ຄືສ້າງຕັ້ງພັກປະຕິວັດຂອງຊົນຊັ້ນກຳມາຊີບໝາຍຄວາມວ່າແມ່ນພັກກອມມູນິດພັກໜຶ່ງຂອງມະຫາຊົນ. ພັກດັ່ງກ່າວ ຕ້ອງເປັນພັກກອມມູນິດອິນດູຈີນພັກດຽວທີ່ເປັນເອກະພາບກັນ".

ເມື່ອອ່ານຈົບລົງ ຫງວຽນອາຍກວັກ ຈຶ່ງເວົ້າວ່າ:

"ຕ້ອງລົງມືປະຕິບັດ, ປະຕິບັດຢ່າງວ່ອງໄວ ແລະ ເດັດດ່ຽວ ບໍ່ຄວນຊັກຊ້າອີກ ຕໍ່ໄປ. ຖ້າປາດສະຈາກພັກປະຕິວັດທີ່ເປັນເອກະພາບກັນ ຂະບວນການກຳມະກອນ ກໍດີ ການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນເຮົາ ຈະມີສະພາບເໝືອນກັບກຳປັ່ນທີ່ບໍ່ມີຜູ້ບັນຊາ. ເພື່ອນທັງຫລາຍ, ຂ້າພະເຈົ້າສະເໜີສ້າງຕັ້ງໜ່ວຍຮັບຜິດຊອບກະກຽມ ກອງປະຊຸມ ເພື່ອເຕົ້າໂຮມອົງການກອມມູນິດທັງໝົດ".

ພວກເພິ່ນທັງສາມພ້ອມກັນຂຽນຈົດໝາຍສະບັບໜຶ່ງຢ່າງຮີບດ່ວນ ແລ້ວສົ່ງໄປ ຫາສະມາຊິກຂອງບັນດາອົງການຈັດຕັ້ງກອມມູນິດຢູ່ ຮ່າໂນ້ຍ ແລະ ໄຊ່ງ່ອນ. ໃນຈົດ ໝາຍຊີ້ໃຫ້ເຫັນວ່າ ສະຫາຍເວືອງ, ຜູ້ຕາງໜ້າຂອງສາກົນກອມມູນິດທີ່ພວກຄົນລ້ວນແຕ່ ຮູ້ຈັກແລ້ວ ໃນປະຈຸບັນກຳລັງຢູ່ໃນຮົ່ງກົງ. ເພື່ອປະຕິບັດຕາມຄຳສັ່ງຂອງຄະນະບໍລິຫານ ງານສາກົນກອມມູນິດ ສະຫາຍເວືອງ ສະເໜີໃຫ້ແຕ່ລະອົງການຈັດຕັ້ງກອມມູນິດ ສົ່ງຜູ້ ຕາງໜ້າຂອງຕົນມາຮົ່ງກົງ ເພື່ອເຂົ້າຮ່ວມກອງປະຊຸມ ເພື່ອເຕົ້າໂຮມ. ພວກເຂົາ ເຈົ້າຕົກລົງດຳເນີນກອງປະຊຸມຢູ່ຄຸ້ມໜຶ່ງຂອງ ເກົາລູນ ຊຶ່ງເປັນບ່ອນ ທີ່ຕັ້ງສຳນັກງານ ຕ່າງປະເທດຂອງສະມາຄົມຊາວໜຸ່ມປະຕິວັດຫວຽດນາມ.

ຄຸ້ມ ເກົາລູນ ເປັນເຂດທີ່ແອອັດໄປດ້ວຍເຮືອນຄັບແຄບເປື້ອນເປິຣົ່ງໜູ ມັນ ເປັນເຮືອນຕູບ ມຸງສັງກະສີ ແລະ ແອ້ມດ້ວຍເຈ້ຍກັກຕົງ ຕັ້ງຢູ່ເທິງແຜ່ນດິນຂອງ ຮົ່ງ ກົງ. ໃນກໍລະນີເກີດອັນຕະລາຍ, ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມອາດຈະຫລົບໜີເຂົ້າ ໄປດິນຈີນໄດ້ຢ່າງວ່ອງໄວ.

ກຳນົດເວລາດຳເນີນກອງປະຊຸມ ມີຄວາມໝາຍບໍ່ໜ້ອຍສຳລັບຮັບປະກັນຄວາມ ປອດໄພຂອງກອງປະຊຸມທີ່ນັດໝາຍໄວ້ແລ້ວ. ຄະນະຈັດຕັ້ງກອງປະຊຸມຕົກລົງຈະໄຂປະ ຊຸມຂຶ້ນໃນໂອກາດບຸນປີໃໝ່. ຢູ່ພາກຕາເວັນອອກ, ປີໃໝ່ແມ່ນມື້ບຸນມະຫາຊົນທີ່ໃຫຍ່ ທີ່ ສຸດ ແລະ ມີຫລາຍວັນ ຫລືບາງເທື່ອກໍຫລາຍອາທິດ. ໃນໂອກາດປີໃໝ່ ຜູ້ທີ່ເຂົ້າຮ່ວມ ກອງປະຊຸມອາດຈະໜີອອກຈາກປະເທດໂດຍບໍ່ມີໃຜສົນໃຈ, ສ່ວນການລວມຢູ່ ເກົາລູນ ຈະເຮັດໃຫ້ເກີດຄວາມສົງໄສໜ້ອຍກວ່າ.

ທ້າຍເດືອນມັງກອນ ປີ ໑໙໓໐, ຜູ້ຕາງໜ້າຈັດຄົນໄດ້ມາຮອດເກົາລູນ: ຜູ້ ຕາງໜ້າສອງຄົນຂອງພັກກອມມູນິດອິນດູຈີນ, ຜູ້ຕາງໜ້າສອງຄົນ ຂອງພັກກອມມູນິດ

ອານນາມ, ເລຣິ່ງເຊີນ, ໂຮ່ຕຸ່ງເມົາ ເປັນຕົວແທນໃຫ້ແກ່ອົງການຈັດຕັ້ງກອມມູນິດ ທີ່ເຄື່ອນໄຫວຢູ່ຕ່າງປະເທດ, ຫວງວຽນອາຍກວັກ ເປັນຜູ້ຕາງຫນ້າໃຫ້ແກ່ສາກົນກອມມູນິດ ສ່ວນຜູ້ຕາງຫນ້າຂອງສະຫະພັນກອມມູນິດອິນດູຈີນມາບໍ່ທັນຕາມເວລາທີ່ກຳນົດໄວ້. ກອງປະຊຸມເພື່ອເຕົ້າໂຮມຄັ້ງທຳອິດ ເປີດຂຶ້ນຢູ່ຫ້ອງຫນຶ່ງຂອງໂຮງແຮມປະເພດສອງຊຶ່ງເປັນບ່ອນພັກຊົ່ວຄາວຂອງຜູ້ເຂົ້າຮ່ວມສ່ວນຫລາຍ. ຢູ່ເທິງໂຕະບ່ອນທີ່ບັນດາຜູ້ຕາງຫນ້າຂອງບັນດາອົງການຈັດຕັ້ງທີ່ຂັດແຍ່ງກັນ ນັ່ງອ້ອມຢູ່ນັ້ນ ມີເຄື່ອງຫລິ້ນຫມາກເຕົ໊າ ໄວ້ຫນຶ່ງຊຸດ ຄົນຈີນມັກເຄື່ອງຫລິ້ນແບບນີ້ຫລາຍທີ່ສຸດ. ຖ້າມີໃຜສົງໄສ ຍ້ອນວ່າເກີດມີສຽງບົນແຊວຢູ່ໃນຫ້ອງ ກໍອາດຄິດວ່າ ບ່ອນນີ້ແມ່ນສະຖານທີ່ຮ່ວມກັນຂອງຜູ້ທີ່ຫລົງໄຫລນຳການຫຼິ້ນການພະນັນ. ເພື່ອຄວາມປອດໄພ ພວກເຂົາເຈົ້າຈຶ່ງດຳເນີນກອງປະຊຸມຄັ້ງຫນຶ່ງຢູ່ທີ່ນັ່ງຂອງສະຫນາມກິລາທ້ອງຖິ່ນ ໃນເວລາມີການແຂ່ງຂັນເຕາະບານ ໂຊກດີທີ່ຜູ້ຄົນທີ່ເຂົ້າມາຊົມການເຕາະບານບໍ່ຮູ້ພາສາຫວຽດ.

ເຫມືອນດັ່ງທີ່ໂຮ່ຕຸ່ງເມົາ ແລະ ເລຣິ່ງເຊີນ ໄດ້ຄາດຄະເນໄວ້ລ່ວງຫນ້າ ການທີ່ຫວງວຽນອາຍກວັກ ເຂົ້າຮ່ວມໃນກອງປະຊຸມນັ້ນ ໄດ້ເຮັດໃຫ້ມີບັນຍາກາດ ແຫ່ງຄວາມໄວ້ວາງໃຈຖານມິດສະຫາຍເກີດຂຶ້ນ ນັບແຕ່ໄຂກອງປະຊຸມເທື່ອທີ່ຫນຶ່ງພຸ້ນ. ເປັນຫນ້າປິຕິຊື່ນຊົມທີ່ສຸດ ທີ່ບັນຍາກາດອັນນີ້ໄດ້ເຂົ້າມາແທນທີ່ ຄວາມຜິດຂ້ອງຕ້ອງຖຽງກັນ ແລະຄວາມເຫັນບໍ່ກົງກັນ. ເຖິງແມ່ນວ່າຜູ້ຕາງຫນ້າຫລາຍຄົນຍັງບໍ່ຮູ້ຈັກຫນ້າຕາຫວງວຽນອາຍກວັກ, ແຕ່ຜູ້ໃດກໍ່ລ້ວນແຕ່ໄດ້ຍິນໄດ້ຟັງຫລາຍກ່ຽວກັບເພິ່ນ ໃນຖານະທີ່ເພິ່ນເປັນ ຜູ້ນຳຂອງຂະບວນການຮັກຊາດຄົນໃຫມ່, ນັກເຄື່ອນໄຫວຜູ້ຫ້າວຫັນຂອງພັກກອມມູນິດ ຝະລັ່ງ ແລະ ສາກົນກອມມູນິດ. ດ້ວຍເຫດນັ້ນ ຄຳເຫັນຂອງຫວງວຽນອາຍກວັກ ຈຶ່ງມີນ້ຳຫນັກພິເສດ ສຳລັບຜູ້ເຂົ້າຮ່ວມຄົນຫນຸ່ມນ້ອຍ.

ຈຸງຈິງ ນັກປະຫວັດສາດຫວຽດນາມຄົນຫນຶ່ງ ໄດ້ຂຽນໄວ້ວ່າ: "ໃນເບື້ອງ ຕົ້ນເນື່ອງຈາກຜົນສະທ້ອນຂອງຄວາມຜິດຖຽງກັນຢ່າງຮ້າຍແຮງ ລະຫວ່າງ ພັກກອມມູນິດອານນາມ ກັບພັກກອມມູນິດອິນດູຈີນ ມີຫລາຍຄົນບໍ່ເຊື່ອວ່າການພົບພໍ້ກັນຄັ້ງນີ້ຈະມີຫມາກຜົນຕົວຈິງໄດ້. ໂດຍຜ່ານການຕິດຕໍ່ພົວພັນຖານມິດສະຫາຍ ໂດຍສະເພາະໃນເວລາ ມີການແລກປ່ຽນຄວາມເຫັນ ທີ່ສະຫາຍຫວງວຽນອາຍກວັກ ນຳພາຢ່າງຄ່ອງແຄ້ວ,ຍ້ອນຄຳປາໄສຢ່າງເປີດເຜີຍ ແລະ ມີເຫດມີຜົນ, ເພິ່ນຈຶ່ງສາມາດຊັກຊວນໃຫ້ຜູ້ເຂົ້າຮ່ວມ ທັງຫມົດບັນລຸເຖິງຄວາມເປັນເອກະພາບກັນເປັນເທື່ອລະກ້າວ".

ກອງປະຊຸມເລີ່ມເຮັດວຽກແຕ່ວັນທີ ໓ ເດືອນກຸມພາ ຮອດວັນທີ ໔ ເດືອນ ກຸມພາ ເດືອນດຽວກັນ ທຸກບັນຫາທີ່ຜິດຖຽງກັນໄດ້ຖືກແກ້ໄຂໝົດ ແລະ ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ເປັນເອກະພາບກັນຜ່ານມະຕິກ່ຽວກັບການເຕົ້າໂຮມອົງການຈັດຕັ້ງກອມມູນິດໃນທົ່ວປະເທດ ເຂົ້າເປັນພັກກອມມູນິດເອກະພາບ ອັນໄດ້ແກ່ພັກກອມມູນິດ ຫວຽດນາມ. ບັນດາຜູ້ເຂົ້າຮ່ວມກອງປະຊຸມເຫັນດີນຳຂໍ້ວິນິດໄສໂດຍຫຍໍ້ຂອງໂຄງການດຳເນີນງານຂອງພັກ ແລະ ກົດລະບຽບຂອງພັກ ຊຶ່ງແມ່ນສະຫາຍຫວຽນອາຍກວັກເປັນຜູ້ຮ່າງອອກ. ບັນດາເອກະສານເຫຼົ່ານີ້ມີຄວາມໝາຍຄັ້ງປະຫວັດສາດ ເພາະວ່າມັນໄດ້ວາງທິດທາງພື້ນຖານຂອງການປະຕິວັດ ຫວຽດນາມ ສຳລັບໄລຍະຍາວ. ຂໍ້ວິນິດໄສໂດຍຫຍໍ້ຂອງໂຄງການດຳເນີນງານ ໄດ້ໃຫ້ຂໍ້ສັງເກດວ່າ ຫວຽດນາມ ໃນຖານະເປັນ ປະເທດເມືອງຂຶ້ນ ແລະ ເປັນປະເທດເຄິ່ງສັກດີນາ ຖ້າເບິ່ງທາງໂຄງປະກອບ ທາງດ້ານສັງຄົມ-ເສດຖະກິດ ແມ່ນປະເທດທີ່ຢືນຢູ່ປາກປະຕູຂອງການປະຕິວັດປະຊາທິປະໄຕນາຍທຶນແບບໃໝ່ (ພາຍລຸນມາ, ຢູ່ໃນບັນດາເອກະສານທີ່ມີລັກສະນະໂຄງການ ດຳເນີນງານຂອງພັກກອມມູນິດຫວຽດນາມ, ສັບນີ້ຖືກປ່ຽນດ້ວຍສັບ "ການປະຕິວັດຊາດ ປະຊາທິປະໄຕປະຊາຊົນ"). ການປະຕິວັດນີ້ຕ້ອງປະຕິບັດໄປພາຍໃຕ້ການນຳພາ ໂດຍກົງຂອງຊົນຊັ້ນກຳມະກອນ ແລະ ຕ້ອງເປັນສະໄໝຂ້າມຜ່ານບົນເສັ້ນທາງກ້າວໄປສູ່ ການປະຕິວັດສັງຄົມນິຍົມ. ໜ້າທີ່ຂອງການປະຕິວັດແມ່ນການຂັບໄລ່ໄຖທົວຈັກກະພັດ ຝະລັ່ງ ແລະ ສັກດີນາ, ເຮັດໃຫ້ປະເທດຫວຽດນາມມີເອກະລາດແຫ່ງຊາດ ຢ່າງສົມບູນ,ມອບທີ່ດິນໃຫ້ເປັນຂອງປະຊາຊົນ, ສ້າງຕັ້ງລັດຖະບານກຳມະກອນ, ຊາວນາ, ທະຫານຂຶ້ນ, ມອບສິດເສລີພາບ, ປະຊາທິປະໄຕໃຫ້ແກ່ປະຊາຊົນ ແລະ ຈັດຕັ້ງກອງທັບ ກຳມະກອນ ແລະ ຊາວນາຂຶ້ນ.

ຢູ່ໃນຂໍ້ວິນິດໄສຂອງໂຄງການ ແລະ ກົດລະບຽບຊີ້ບອກວ່າ ພັກກອມມູນິດຫວຽດນາມ ແມ່ນກອງລະວັງໜ້າຂອງຊົນຊັ້ນກຳມະກອນຫວຽດນາມທີ່ມີຄວາມສາມາດ ນຳພາມະຫາຊົນຢ່າງກວ້າງຂວາງ. ໃນການເຄື່ອນໄຫວຂອງຕົນ ພັກເປັນຜູ້ມີແນວທາງ ເຮັດໃຫ້ປະຊາຊົນຫວຽດນາມສາມັກຄີກັບບັນດາປະຊາຊາດທີ່ຖືກກົດຂີ່ໃນທົ່ວໂລກ,ຕິດພັນຢ່າງສະໜິດແໜ້ນ ກັບຊົນຊັ້ນກຳມະກອນສາກົນ ໂດຍສະເພາະກັບຊົນຊັ້ນກຳມະກອນຝະລັ່ງທີ່ເປັນເມືອງແມ່.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ຕົກລົງຍຸຕິການປະທະກັນ ແລະ ຄວາມບໍ່ລົງລອຍກັນທີ່

ມີໃນເມື່ອກ່ອນ ນັບແຕ່ເວລານັ້ນໂລດ, ແລະ ຮ່ວມມືກັນຢ່າງຈິງໃຈໃນການປະຕິບັດມາຕະການລະອຽດ ເພື່ອເຕົ້າໂຮມອົງການຈັດຕັ້ງກອມມູນິດແຕ່ສູນກາງລົງຫາຮາກຖານໃຫ້ເປັນເອກະພາບກັນ. ຄະນະບໍລິຫານງານສູນກາງຊົ່ວຄາວໄດ້ຖືກເລືອກຕັ້ງຂຶ້ນ ເພື່ອນຳພາຂະບວນວິວັດແຫ່ງການເຕົ້າໂຮມ ແລະ ການເຄື່ອນໄຫວຂອງພັກ. ດັ່ງນັ້ນ ກອງປະຊຸມເພື່ອເຕົ້າໂຮມພັກ ຄວາມຈິງແລ້ວໄດ້ທຳໜ້າທີ່ເປັນກອງປະຊຸມໃຫຍ່ຂອງພັກ ເພາະວ່າຢູ່ທີ່ກອງປະຊຸມນີ້ເອງ ໄດ້ສ້າງຕັ້ງພັກ ແລະ ໄດ້ວາງຫລັກການພື້ນຖານ ໃນການກໍ່ສ້າງພັກກອມມູນິດຫວຽດນາມ, ວາງແນວທາງຍຸດທະສາດ, ຍຸດໂທບາຍຂອງການປະຕິວັດຫວຽດນາມ ແລະ ໄດ້ເລືອກຕັ້ງອົງການນຳພາຂອງພັກ.

ນີ

ຕອນແລງວັນທີ ໕ ເດືອນກຸມພາ ຫວຽນອາຍກວັກ ໄດ້ຈັດພາເຂົ້ານ້ອຍໆຂຶ້ນຢູ່ຫ້ອງນອນຂອງຕົນ. ຄວາມໄຝ່ຝັນອັນສັກກາລະ ແລະ ເປົ້າໝາຍທີ່ຫວຽນອາຍກວັກສູ້ຊົນດ້ວຍຄວາມລຳບາກ ໃນຕະຫລອດເກືອບຊາວປີຜ່ານມາ ໄດ້ປະກົດເປັນຈິງ. ບັດນີ້ການປະຕິວັດຫວຽດນາມບໍ່ພຽງແຕ່ມີອາວຸດອັນວິເສດຄືທິດສະດີມາກ–ເລນິນ ທີ່ຍືນຍົງຕະຫລອດການເທົ່ານັ້ນ ແຕ່ຫາກຍັງມີພັກນຳພາຊຶ່ງເປັນກອງລະວັງໜ້າທີ່ປະຕິວັດ ຢ່າງແທ້ຈິງ, ທີ່ມີຄວາມສາມາດນຳໃຊ້ອາວຸດອັນວິເສດດັ່ງກ່າວໃຫ້ເປັນຄືກຳລັງແຮງອັນບໍ່ມີ ໃຜທັບມ້າງໄດ້.

ເມື່ອຜູ້ຕາງໜ້າໄດ້ນັ່ງອ້ອມໂຕະຮຽບຮ້ອຍແລ້ວ, ຫວຽນອາຍກວັກ ເວົ້າຂຶ້ນດ້ວຍຄວາມຕື້ນຕັນໃຈວ່າ:

"ອ້າຍນ້ອງ! ມື້ນີ້ເປັນມື້ ປະຫວັດສາດສຳລັບພວກເຮົາ. ເໝືອນດັ່ງ ເລນິນຜູ້ຍິ່ງໃຫຍ່ໄດ້ເວົ້າໄວ້ວ່າ: "ມີແຕ່ພັກທີ່ມີທິດສະດີນຳໜ້າເທົ່ານັ້ນ ຈຶ່ງມີຄວາມອາດສາມາດເຮັດຫລິ້ນບົດບາດເປັນນັກຮົບປະຈັນບານ" * . ດຽວນີ້ພວກເຮົາມີພັກແລ້ວ ຄືພັກ ຂອງຊົນຊັ້ນກຳມະກອນຫວຽດນາມ. ປະຊາຊົນເຮົາມີຊື່ສຽງດ້ວຍມູນເຊື້ອຕໍ່ສູ້ ພິລະອາດຫານມາແຕ່ດົນນານແລ້ວ, ແຕ່ໃນຕະຫລອດຊຸມປີດັ່ງກ່າວ ປະຊາຊົນເຮົາຂາດນາຍ

---

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ຝ ໜ້າ ໔໕. (ເປັນພາສາລັດເຊຍ)

ທ້າຍເຮືອທີ່ປີ້ຊາສາມາດ. ດຽວນີ້ ພັກຂອງພວກເຮົາຕ້ອງແບກຫາບພາລະໜ້າທີ່ ດັ່ງກ່າວ ແລະ ຂ້າພະເຈົ້າເຊື່ອວ່າ ພັກເຮົາຈະນຳພາປະຊາຊົນເຮົາໄປເຖິງໄຊຊະນະໃນການຕໍ່ສູ້ຍາດເອົາເອກະລາດ ແລະ ອິດສະຫລະພາບມາໃຫ້ປະເທດຊາດທີ່ແສນຮັກ".

ແນວຄິດເຫລົ່ານີ້ ຂອງຫງວຽນອາຍກວັກ ເປັນພື້ນຖານຂອງຄຳຮຽກຮ້ອງ ເຖິງປະຊາຊົນຫວຽດນາມ ເນື່ອງໃນໂອກາດການສ້າງຕັ້ງພັກກອມມູນິດຫວຽດນາມ, ຄຳຮຽກຮ້ອງດັ່ງກ່າວເພິ່ນໄດ້ຝາກໄປຍັງປະເທດນຳບັນດາຜູ້ເຂົ້າຮ່ວມປະຊຸມ. ຄຳຮຽກຮ້ອງ ທີ່ຫງວຽນອາຍກວັກ ເປັນຜູ້ເຊັນ "ຕາງໜ້າສາກົນກອມມູນິດ ແລະ ພັກກອມມູນິດຫວຽດນາມ" ໄດ້ຖືກລົງພິມຢູ່ທີ່ໜັງສືພິມໃຕ້ດິນກອມມູນິດຢູ່ທີ່ບັກກີ່ ແລະ ນາມກີ່. ບັນດາວົງການປະຊາທິປະໄຕພາຍໃນປະເທດ ໄດ້ໃຫ້ຄວາມສົນໃຈຕໍ່ຄຳຮຽກຮ້ອງດັ່ງກ່າວ ຢ່າງກວ້າງຂວາງ. ຄຳຮຽກຮ້ອງບາງຕອນຂຽນວ່າ: "ພັກກອມມູນິດຫວຽດນາມໄດ້ຖືກສ້າງຕັ້ງຂຶ້ນແລ້ວ. ນັ້ນແມ່ນພັກຂອງຊົນຊັ້ນກຳມະຊີບ. ພັກຈະນຳພາຊົນຊັ້ນກຳມະຊີບ ທີ່ເປັນກຳລັງນຳພາຂອງການປະຕິວັດຫວຽດນາມ ໃຫ້ລຸກຮືຂຶ້ນຕໍ່ສູ້ ເພື່ອປົດປ່ອຍພວກທີ່ຖືກກົດຂີ່ຂູດຮີດໝົດທຸກຄົນ. ອ້າຍເອື້ອຍນ້ອງ ຈົ່ງເຂົ້າສັງກັດຢູ່ໃນພັກ, ຈົ່ງສະໜັບສະໜູນພັກ ແລະ ເດີນຕາມພັກ ເພື່ອໂຄ່ນລົ້ມອຳນາດຂອງພວກຈັກກະພັດຝະລັ່ງ, ສັກດີນາ ຫວຽດນາມ ແລະ ຊົນຊັ້ນນາຍທຶນຝືນປະຕິວັດ, ເຮັດໃຫ້ປະເທດຫວຽດນາມມີເອກະລາດ , ສ້າງຕັ້ງລັດຖະບານກຳມະກອນ ຊາວນາ ທະຫານ..."

ບັນດານັກກອມມູນິດ ເຊິ່ງໃນເວລາສ້າງຕັ້ງພັກ ມີຈຳນວນພົນ ໒໑໑ ຄົນ ກໍໄດ້ຊົມເຊີຍມະຕິຂອງກອງປະຊຸມເພື່ອເຕົ້າໂຮມກັນ. ແນ່ນອນວ່າ ການປະຕິບັດມະຕິ ຂອງກອງປະຊຸມແມ່ນດຳເນີນໄປທ່າມກາງການຕໍ່ສູ້ຢ່າງເຜັດຮ້ອນ, ທ່າມກາງບັນຍາກາດແຫ່ງການອະພິປາຍ ແລະ ຖົກຖຽງກັນດ້ານແນວຄິດ, ຍ້ອນວ່າທິດສະດີ ແລະ ທັດສະນະຊາດຄັບແຄບແບບພວກນາຍທຶນນ້ອຍຍັງຄອບງຳຢູ່ໃນໝູ່ສະມາຊິກພັກຈຳນວນໜຶ່ງ . ໃນເບື້ອງຕົ້ນ ສະມາຊິກພັກສ່ວນໃຫຍ່ ລ້ວນແຕ່ມີນ້ຳໃຈຮັກຊາດ ແລະ ມີແນວຄິດ ຕ້ານລະບອບລ່າເມືອງຂຶ້ນເທົ່ານັ້ນ ເຂົາເຈົ້າຍັງບໍ່ທັນຮັບຮູ້ວ່າ ພັກກອມມູນິດແມ່ນພັກການເມືອງແບບໃໝ່, ແກ່ນສານຂອງພັກຕ້ອງປະກອບດ້ວຍຜູ້ຕາງໜ້າຂອງຊົນຊັ້ນທີ່ກ້າວໜ້າທີ່ສຸດ ຄືຊົນຊັ້ນກຳມະຊີບ ແລະ ຊົນຊັ້ນຊາວນາ ທີ່ເປັນພັນທະມິດຕົ້ນຕໍຂອງເຂົາເຈົ້າ.

ແຕ່ວ່າ "ຄວາມຫຍຸ້ງຍາກຂອງການຂະຫຍາຍຕົວ" ຊຶ່ງບໍ່ອາດຈະຫລີກລ່ຽງໄດ້ນັ້ນ ກໍກຳຈັດປັດເປົ່າໄດ້ງ່າຍດາຍ. ການກໍ່ສ້າງພັກມາກຊິດ-ເລນິນນິດ ອັນແທ້ຈິງ ໄດ້ດຳ

ເພີມໄປຢ່າງວ່ອງໄວ. ທົ່ວທຸກແຫ່ງໂດຍສະເພາະຢູ່ໂຮງຈັກ, ໂຮງງານມີບັນດາໜ່ວຍພັກທີ່ຫາກໍ່ຖືກສ້າງຕັ້ງຂຶ້ນໃໝ່. ພວກນັກສືບສອດແນມຝະລັ່ງສັງເກດເຫັນດ້ວຍຄວາມກັງວົນວ່າ ພັກແບບໃໝ່ນີ້ມີການພົວພັນແໜ້ນແຟ້ນດ້ານແນວຄິດກັບສາກົນກອມມູນິດແລະພັກກອມມູນິດຝະລັ່ງນັ້ນ ໄດ້ຮັບການສ້າງຕັ້ງຈົນສຳເລັດຜົນ. ນັກສືບຄົນໜຶ່ງ ໄດ້ລາຍງານດັ່ງນີ້: "ຮ່າງມະຕິທີ່ຜ່ານກອງປະຊຸມນັ້ນ ໄດ້ຖືກສົ່ງໄປເຜີຍແຜ່ໃນໝູ່ສະມາຊິກພັກໂດຍບັນດາຜູ້ຕາງໜ້າທີ່ມາເຂົ້າຮ່ວມກອງປະຊຸມໃຫຍ່. ມະຕິໄດ້ຮັບຄວາມຊົມເຊີຍ ຢ່າງສຸດຈິດສຸດໃຈ...ເຈດຕະນາດີຂອງທັງສອງພັກ (ພັກກອມມູນິດອິນດູຈີນ ແລະ ພັກກອມມູນິດອານນາມ) ພາໃຫ້ເກີດມີການຕົກລົງກັນໄດ້ຢ່າງສົມບູນ ແມ່ນແຕ່ໃນບັນຫາຊຶ່ງກ່ອນໜ້ານີ້ບໍ່ດົນຖືວ່າເກືອບຈະແກ້ໄຂບໍ່ໄດ້. ພຽງແຕ່ພາຍໃນສອງສາມເດືອນເທົ່ານັ້ນ, ນັກກອມມູນິດ ໄດ້ເຮັດວຽກໃຫຍ່ໂຕອັນໜຶ່ງ: ຄະນະບໍລິຫານງານສູນກາງຊົ່ວຄາວ,ຄະນະກຳມະການພັກຢູ່ທີ່ບັກກີ່, ຈູງກີ່, ນາມກີ່ ແລະ ບັນດາຄະນະພັກຂັ້ນແຂວງ ຖືກສ້າງຕັ້ງຂຶ້ນ. ບັນດາສະຫະພັນເກົ່າຂອງພວກກຳມະກອນ ແລະຊາວນາ ໄດ້ຮັບການຂະຫຍາຍອອກ ແລະ ສະຫະພັນອັນໃໝ່ກໍ່ຖືກຈັດຕັ້ງຂຶ້ນ".

ການສ້າງຕັ້ງພັກກອມມູນິດຂຶ້ນມາ ແມ່ນບາດລ້ຽວໜຶ່ງທີ່ສຳຄັນທີ່ສຸດໃນປະຫວັດສາດຂອງປະເທດຫວຽດນາມ. ໃນທຸກວັນນີ້ ເລື່ອງນີ້ເປັນທີ່ປະຈັກຕາເປັນພິເສດ ໃນເມື່ອໝົດທຸກຄົນຮູ້ຈັກ ບັນດາໝາກຜົນອັນສະຫວ່າງສະໄຫວຂອງການເຄື່ອນໄຫວ ຂອງພັກ ໃນໄລຍະເກືອບເຄິ່ງສະຕະວັດ.

ການປະກົດຕົວຂອງພັກກອມມູນິດຫວຽດນາມ ໃນທ້າຍຊຸມປີ ໒໐ ແລະ ຕົ້ນຊຸມປີ ໓໐ ຂອງສະຕະວັດນີ້ ແມ່ນເຫດການໜຶ່ງທີ່ຖືກກັບກາລະເວລາທີ່ສຸດ ເພາະວ່າໃນຊຸມປີດັ່ງກ່າວກະແສຄື້ນອັນໂຫດຮ້າຍທາລຸນຂອງວິກິດການເສດຖະກິດ ທີ່ເຮັດໃຫ້ກະໂຕ ກົກເຫງົ້າໂລກນາຍທຶນ ສັ່ນສະເທືອນ ກໍ່ຫລັ່ງໄຫລເຂົ້າມາຫວຽດນາມເຊັ່ນກັນ. ຄຳຂວັນຕໍ່ສູ້ເພື່ອເອກະລາດແຫ່ງຊາດຂອງຫວຽດນາມ,ຕ້ານແອກຄອບຄອງຂອງພວກລ່າເມືອງຂຶ້ນຝະລັ່ງຊຶ່ງນັບວັນນັບຕິດພັນກັບຄວາມຮຽກຮ້ອງດ້ານສັງຄົມຂອງປະຊາຊົນຜູ້ອອກແຮງງານຫວຽດນາມຢ່າງໜາແໜ້ນ. ໃນເງື່ອນໄຂປະຫວັດສາດໃໝ່ດັ່ງກ່າວ ຊົນຊັ້ນ ກຳມະກອນຫວຽດນາມໄດ້ປະກາດຕົນເປັນກຳລັງນຳພາຂອງການປະຕິວັດທີ່ກຳລັງສຸກງອມຢ່າງ

ເຕັມທີ່. ຊົນຊັ້ນກຳມະກອນຫວຽດນາມໄດ້ກາຍມາເປັນກຳລັງການເມືອງທີ່ເຂັ້ມແຂງອັນໜຶ່ງ ເຖິງແມ່ນວ່າເສດຖະກິດຫວຽດນາມເວລານັ້ນ ຖືກສາຍໂສ້ຂອງລັດທິລ່າເມືອງຂຶ້ນຜູກຮັດ ຍັງມີລັກສະນະຫລ້າຫລັງທີ່ສຸດ ແລະ ເຄິ່ງສັກດີນາ. ບັນຫາແມ່ນຢູ່ບ່ອນວ່າເຖິງແມ່ນວ່າມີຈຳນວນພົນໜ້ອຍ ແຕ່ຊົນຊັ້ນກຳມະກອນຫວຽດນາມ ພັດລວມສູນສູງ ສົມຄວນ ແລະ ເປັນເນື້ອດຽວກັນທີ່ສຸດ, ໃນຖັນແຖວກຳມະກອນກໍບໍ່ມີກຳມະກອນທາວຊົນມູນນາຍ ດັ່ງນັ້ນ ບັນດານັກກອມມູນິດຫວຽດນາມຈຶ່ງບໍ່ມີຄວາມຈຳເປັນຕ້ອງຕໍ່ສູ້ຢ່າງດຸເດືອດ ຕ້ານອິດທິພົນຂອງລັດທິປະຕິຮູບນິຍົມກໍຄືກັນກັບການແຊກຊຶມຂອງແນວຄິດສວຍໂອກາດເຂົ້າໃນຂະບວນການກຳມະກອນ. ອີກປະການໜຶ່ງ ຊົນຊັ້ນກຳມະກອນຫວຽດນາມຍັງມີ ຊົນຊັ້ນຊາວນາ ທີ່ເປັນພັນທະມິດຜູ້ໄວ້ວາງໃຈໄດ້ ແລະ ມີຈຳນວນຫລວງຫລາຍ, ສ່ວນຊົນຊັ້ນຊາວນາເປັນຜູ້ທຸກຍາກທີ່ສຸດ ສະນັ້ນ ຖ້າເບິ່ງທາງດ້ານຈິດຕະສາດ–ສັງຄົມແລ້ວ ເຂົາເຈົ້າຈຶ່ງຫຍັບເຂົ້າມາກັບຊົນຊັ້ນກຳມະກອນເປັນສ່ວນໃຫຍ່.

ຢູ່ຫວຽດນາມເມືອງຂຶ້ນ ສະພາບການຕົວຈິງທາງປະຫວັດສາດ ກໍແມ່ນວ່າຊົນຊັ້ນກຳມະກອນກຳເນີດຂຶ້ນ ແລະ ໄດ້ກາຍມາເປັນກຳລັງການເມືອງອັນເຂັ້ມແຂງ ໄວກ່ອນຊົນຊັ້ນນາຍທຶນແຫ່ງຊາດ. ຕົກມາຮອດຕອນຕົ້ນຊຸມປີ ໓໐ ຊົນຊັ້ນນາຍທຶນຫວຽດນາມ ມີຈຳນວນພົນບໍ່ຫລາຍ ຊ້ຳຍັງອ່ອນແອຫລາຍທີ່ສຸດດ້ານເສດຖະກິດ ແລະ ການເມືອງ. ບົນເວທີການເມືອງຫວຽດນາມ, ນອກຈາກພັກກອມມູນິດ, ບໍ່ມີກຳລັງຕົວຈິງອັນໃດອີກ ທີ່ອາດສາມາດເປັນຜູ້ນຳພາການຕໍ່ສູ້ປົດປ່ອຍຊາດ. ບັນດາພັກຝ່າຍການເມືອງທີ່ເດີນຕາມລັດທິຊົງຈື໋ ແລະ ພັກຝ່າຍສັກດີນາອື່ນໆທີ່ມີມາກ່ອນ ກໍບໍ່ສາມາດສູ້ຢືນກັບ ພວກລ່າເມືອງຂຶ້ນໄດ້ແຕ່ດົນນານແລ້ວ ແລະ ຫລັງຈາກທີ່ພໍ່ເຖົ້າ ຟານໂບ້ຍເຈົາ ຖືກຈັບແລ້ວພັກເຫລົ່ານັ້ນໄດ້ຖອນຕົວອອກຈາກຂະບວນການຕໍ່ສູ້ປົດປ່ອຍຊາດຢ່າງສິ້ນເຊີງ. ກາງຊຸມປີ ໒໐ , ພັກຊະນະຊາດຫວຽດນາມ ເຊິ່ງເປັນ "ພັກກົກມິນຕັງ ແບບຫວຽດນາມ" ໄດ້ກຳເນີດຂຶ້ນແທນທີ່ ແຕ່ຊ້ຳພັດກ້າວໄປຕາມເສັ້ນທາງສ່ຽງໄພ ແລະ ຊ້າຍຈັດ. ໃນຕອນຕົ້ນຊຸມປີ ໓໐, ໂດຍພະຍາຍາມຊອກຫາວິທີເປັນຜູ້ນຳພາ ຂະບວນການຮັກຊາດ ພັກຊະນະຊາດຫວຽດນາມຈຶ່ງປຸກປັ່ນ ການລຸກຮື້ຂຶ້ນປະກອບອາວຸດຢູ່ບັກກີ. ການລຸກຮື້ຂຶ້ນຍັງບໍ່ທັນໄດ້ກະກຽມຢ່າງຮອບຄອບ ດັ່ງນັ້ນຈຶ່ງປະລາໄຊຢ່າງໄວວາ. ພັກຊະນະຊາດໃນຕົວຈິງ ກໍແຕກສະລຸຜູ່ຜາຍ. ບັນດາຜູ້ນຳທີ່ຍັງເຫລືອໂຕນໜີໄປຢູ່ດິນຈີນ. ພວກເຂົາເຈົ້າຮັບຮູ້ ໂຄງການການເມືອງຂອງພັກກົກມິນຕັງຈີນ ແລະ ໂດຍຢືນຢູ່ໃນຖັນແຖວຂອງພັກກົກມິນຕັງນັ້ນ

ເຂົາເຈົ້າຈຶ່ງກາຍເປັນອິດທິກຳລັງປະຕິການທີ່ເປັນສັດຕູກັບຜົນປະໂຫຍດຂອງການປະຕິ-ວັດຫວຽດນາມເທື່ອລະກ້າວ.

ໄລຍະພາຍຫລັງການສ້າງຕັ້ງພັກກອມມູນິດຫວຽດນາມ ໄດ້ເປັນໄລຍະທີ່ພົ້ນເດັ່ນ ດ້ວຍຂະບວນປະທ້ວງທີ່ມີລັກສະນະມະຫາຊົນ ຢ່າງບໍ່ເຄີຍມີມາກ່ອນ ໃນທົ່ວປະເທດ ທັງທາງກ້ວາງ ແລະ ທາງເລິກ. ຢູ່ໃນທົ່ວທຸກແຫ່ງຂອງປະເທດ ພາຍໃຕ້ການນຳຂອງພັກກອມມູນິດ ກຳມະກອນ ແລະ ຊາວນາໄດ້ຈັດຕັ້ງການເດີນຂະບວນປະທ້ວງ,ນັດຢຸດງານ ໂດຍເລັ່ງທວງໃຫ້ມີການຕອບສະໜອງຄວາມຮຽກຮ້ອງບໍ່ພຽງແຕ່ທາງດ້ານເສດຖະກິດ, ແຕ່ຫາກຍັງທາງດ້ານການເມືອງອີກດ້ວຍ ຂະບວນການໄດ້ບັນລຸຈຸດສຸດຍອດ ຢ່ວງເຂົ້າທ້າຍປີ ໑໙໓໐, ເມື່ອ ໑໑໖ ໝູ່ບ້ານຂອງແຂວງ ເງ້ອານ ແລະ ຮ່າຕິ່ງ ສ້າງຕັ້ງສະພາໂຊວຽດຕາມແບບຂອງຊາວຜູ້ອອກແຮງງານລັດເຊຍ. ນັ້ນຄືບັນດາອົງການ ແຫ່ງອຳນາດປະຕິວັດຂອງປະຊາຊົນ ອົງການທຳອິດຢູ່ຫວຽດນາມ ແລະ ສ່ວນໃຫຍ່ແລ້ວແມ່ນບັນດາພັກກອມມູນິດເປັນຜູ້ນຳພາ.

ເກືອບໜຶ່ງປີ ສະພາໂຊວຽດເງ້ຕິ່ງ(ແມ່ນປະຊາຊົນເອງທີ່ຂະໜານນາມໃຫ້ ຄືແນວນີ້) ເປັນໝູ່ດອນເອກະລາດ, ອິດສະຫລະພາບຢູ່ອິນດູຈີນເມືອງຂຶ້ນ. ສະພາໂຊວຽດໄດ້ດັບສູນກົງຈັກປົກຄອງລ່າເມືອງຂຶ້ນຢູ່ທ້ອງຖິ່ນຢ່າງສິ້ນເຊີງ, ໄດ້ຂັບໄລ່ ພວກສັກດີນາ, ເຈົ້າທີ່ດິນໃຫຍ່, ອາດຍາເຈົ້ານາຍອອກຈາກບ້ານ. ບັນດາອົງການ ແຫ່ງອຳນາດຂອງປະຊາຊົນໄດ້ປະຕິບັດການດັດສ້າງແບບປະຊາທິປະໄຕ ເປັນລວດດຽວ ໂລດເຊັ່ນ ລົບລ້າງການເສຍພາສີໂດຍແມ່ນພວກລ່າເມືອງຂຶ້ນຕັ້ງຂຶ້ນ, ແບ່ງປັນທີ່ດິນຂອງປະຊາຄົມໃຫ້ຊາວນາທີ່ບໍ່ມີທີ່ດິນ ຫລືມີທີ່ດິນໜ້ອຍຄືນໃໝ່, ບັງຄັບພວກເຈົ້າທີ່ດິນໃຫ້ລົດຄ່າເຊົ່າດິນ ແລະ ລົບລ້າງການເສຍພາສີເພີ່ມເຕີມ. ສະພາໂຊວຽດ ເງ້ຕິ່ງ ຍັງໄດ້ ພິມໃບປິວມີຮູບຄ້ອນຕີ ແລະ ກ່ຽວ ແລ້ວແຈກຢາຍທົ່ວປະເທດ ໂດຍມີໃຈຄວາມທີ່ຮຽກຮ້ອງໄປຍັງປະຊາຊົນຜູ້ອອກແຮງງານຫວຽດນາມ ໃຫ້ທຳຕາມແບບຢ່າງຂອງປະຊາຊົນ ໂຊວຽດ.

ການລຸກຮືຂຶ້ນຄັ້ງນີ້ ຢັ້ງຢືນໃຫ້ເຫັນວ່າ ຊົນຊັ້ນກຳມະກອນຫວຽດນາມກຳລັງກາຍເປັນຜູ້ນຳພາການປະຕິວັດຕ້ານຈັກກະພັດ ຕ້ານສັກດີນາ ຊຶ່ງເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຢູ່ຫວຽດນາມ. ພາຍລຸນມາ ປະທານໂຮ່ຈີມິນ ໄດ້ຊີ້ໃຫ້ເຫັນວ່າ: "ສະພາ ໂຊວຽດເງ້ຕິ່ງ ແມ່ນການຊ້ອມຮົບໃຫຍ່ ໃຫ້ແກ່ການປະຕິວັດປົດປ່ອຍຊາດໃນອະນາຄົດ. ປະ

ຫວັດສາດໄດ້ບັນທຶກສະພາໂຊວຽດເງ່ຕິງ ວ່າເປັນຄືເຫດການທີ່ສະແດງອອກເຖິງຄວາມອາດສາມາດບົ່ມຊ້ອນແບບປະຕິວັດຂອງກຳມະກອນ ແລະ ຊາວນາຫວຽດນາມ. ເຖິງວ່າຂະບວນການປະຕິວັດໄດ້ຮັບຄວາມປະລາໄຊກໍຕາມ ແຕ່ມັນໄດ້ຝຶກຝົນຫລໍ່ຫລອມກຳລັງໃຫ້ແກ່ໄຊຊະນະໃນການສູ້ຮົບໃນອະນາຄົດຂອງການປະຕິວັດເດືອນສິງຫາ".

ໃນເດືອນຕຸລາ ປີ ໑໙໓໐ ໃນລະຫວ່າງທີ່ການລຸກຮືຂຶ້ນຢູ່ທີ່ແຂວງເງ່ຕິງແລະຮ່າຕິງ ຢ່ວງເຂົ້າສູ່ລະດັບສູງທີ່ສຸດ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມໄດ້ໄຂກອງປະຊຸມຄົບຄະນະຂຶ້ນເປັນຄັ້ງທຳອິດ. ສ່ວນສະຫາຍຫງວຽນອາຍກວັກ ບໍ່ສາມາດເຂົ້າຮ່ວມກອງປະຊຸມ. ຫລັງຈາກກອງປະຊຸມເພື່ອເຕົ້າໂຮມກັນ ເພິ່ນໄດ້ກັບຄືນ ສະຫຍາມ ແລະ ຕໍ່ມາເພິ່ນໄດ້ອອກເດີນທາງໄປມາເລເຊຍ, ເພື່ອປະຕິບັດຕາມຫນ້າທີ່ຂອງຄະນະບໍລິຫານງານສາກົນກອມມູນິດ. ເພື່ອນຮ່ວມຮົບຂອງເພິ່ນຄື ເຈີນຟູ ນັກຮຽນ ທີ່ຮຽນຈົບຊຸດຮຽນການເມືອງຢູ່ ກວາງເຈົາ ແລະ ຕໍ່ມາໄດ້ເປັນນັກສຶກສາມະຫາວິທະຍາໄລກອມມູນິດ ສຳລັບຊາວຜູ້ອອກແຮງງານຂອງພາກຕາເວັນອອກນັ້ນ ເປັນປະທານກອງປະຊຸມ. ເຈີນຟູກັບຈາກມົດສະກູຄືນມາປະເທດຫວຽດນາມ ພ້ອມດ້ວຍຂໍ້ສະເຫນີຂອງຄະນະບໍລິຫານງານສາກົນກອມມູນິດ ກ່ຽວກັບໂຄງການດຳເນີນງານແລະຫນ້າທີ່ການເມືອງຂອງພັກກອມມູນິດຫວຽດນາມທີ່ຫາກໍເກີດຂຶ້ນໃຫມ່ຕິດຕົວມານຳ.

ກອງປະຊຸມຄົບຄະນະໄດ້ພິຈາລະນາ ແລະ ເຫັນດີນຳຂໍ້ວິນິດໄສກ່ຽວກັບການປະຕິວັດປະຊາທິປະໄຕນາຍທຶນຢູ່ຫວຽດນາມ ຊຶ່ງແມ່ນສະຫາຍເຈີນຟູ ເປັນຜູ້ສະເຫນີ, ຂໍ້ວິນິດໄສນີ້ ໄດ້ກາຍເປັນໂຄງການການເມືອງຂອງພັກ. ເວລາຮັບຮອງເອົາເອກະສານນີ້ ຜູ້ເຂົ້າຮ່ວມກອງປະຊຸມໄດ້ພະຍາຍາມຄຳນຶງຢ່າງຮອບຄອບເຖິງມະຕິຂອງສາກົນ ກອມມູນິດ ກ່ຽວກັບບັນຫາປະຊາຊາດເມືອງຂຶ້ນ ກໍຄືເງື່ອນໄຂລະອຽດຂອງອິນດູຈີນ. ຂໍ້ວິນິດໄສໄດ້ຊີ້ໃຫ້ເຫັນວ່າການປະຕິວັດຂອງອິນດູຈີນຕ້ອງຜ່ານສອງໄລຍະ. ໄລຍະທຳອິດ ແມ່ນການປະຕິວັດປະຊາທິປະໄຕນາຍທຶນແບບໃຫມ່ ເຊິ່ງໃນໄລຍະນັ້ນໂດຍຢູ່ພາຍໃຕ້ການນຳຂອງຊົນຊັ້ນກຳມະກອນ ປະຊາຊົນຈະໂຄ່ນລົ້ມອຳນາດປົກຄອງ ຂອງພວກລ່າເມືອງຂຶ້ນ ແລະ ສັກດີນາ, ຍາດເອົາເອກະລາດແຫ່ງຊາດ ແລະ ມອບທີ່ດິນໃຫ້ຄົນທີ່ທຳການ ປູກຝັງ. ຫນ້າທີ່ສອງຢ່າງຄື ຕ້ານຈັກກະພັດແລະ ຕ້ານສັກດີນາມີການພົວພັນນຳກັນຢ່າງໃກ້ຊິດ ແລະ ສະຫນິດແຫນ້ນ. ກຳລັງດັນອັນເປັນພື້ນຖານຂອງການປະຕິວັດປະຊາທິປະໄຕນາຍທຶນແບບໃຫມ່ນັ້ນໄດ້ແກ່ກຳມະກອນ ແລະ ຊາວນາ. ພັກກອມມູນິດມີຫນ້າທີ່ ຕ້ອງ

ຊອກຫາວິທີທາງດຶງດູດປະຊາຊົນຫລາຍຊັ້ນຄົນ ທີ່ມີຈຳນວນຫລວງຫລາຍທີ່ສຸດ ໃຫ້ໄປນຳການປະຕິວັດ ແລະ ໂດຍອາໄສຄວາມຮຸນແຮງປະຕິວັດພາຍໃຕ້ຮູບການປະກອບ ອາວຸດລຸກຮື້ຂຶ້ນ ພັກຈຳເປັນຕ້ອງສ້າງຕັ້ງອຳນາດປົກຄອງປະຊາຊົນ.

ພາຍຫລັງປະຕິບັດສຳເລັດສອງໜ້າທີ່ເຫລົ່ານີ້ ໄລຍະທີສອງຄື ໄລຍະປະຕິວັດສັງຄົມນິຍົມກໍຈະເລີ່ມຕົ້ນຂຶ້ນ. ໂຄງການດຳເນີນງານໄດ້ເນັ້ນໜັກວ່າ: "ຫລັງຈາກຍຶດອຳນາດມາໄດ້ແລ້ວ ດ້ວຍການຊ່ວຍເຫລືອຂອງບັນດາປະເທດ ທີ່ໄດ້ສະຖາປະນາ ຜະເດັດການກຳມາຊີບຂຶ້ນ ຍ້ອນໄຊຊະນະຂອງການປະຕິວັດປະຊາທິປະໄຕນັ້ນ ປະຊາຊົນອິນດູຈີນ ຈະລົງມືປະຕິບັດການກໍ່ສ້າງສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວ ແບບທຶນນິຍົມ ໃນທັນທີທັນໃດ".

ທີ່ກອງປະຊຸມໄດ້ເລືອກສະຫາຍ ເຈີນຟູ ເປັນເລຂາທິການໃຫຍ່ຄົນທຳອິດ ຂອງພັກ ແລະ ໄດ້ຜ່ານມະຕິປ່ຽນຊື່ພັກມາເປັນພັກກອມມູນິດອິນດູຈີນ. ການທີ່ພັກປ່ຽນຊື່ແມ່ນໂດຍປະຕິບັດຕາມຂໍ້ແນະນຳຂອງຄະນະບໍລິຫານງານສາກົນກອມມູນິດ ເຊິ່ງມີຄວາມເຫັນວ່າ ໃນເວລານັ້ນ ອິນດູຈີນທີ່ຢູ່ໃນອາລັກຂາຂອງຝະລັ່ງ ແມ່ນດິນແດນອັນໜຶ່ງ ອັນດຽວດ້ານພູມສາດ ແລະ ການເມືອງ. ສ່ວນປະຊາຊົນຫວຽດນາມ, ລາວ, ຂະແມ ລ້ວນແຕ່ມີເປົ້າໝາຍຄືກັນ ແລະ ສາມປະເທດເຫລົ່ານັ້ນ ຈະສາມາດບັນລຸເປົ້າໝາຍ ດັ່ງກ່າວໄດ້ ກໍລ້ວນແຕ່ຜ່ານການຕໍ່ສູ້ຮ່ວມກັນ ບົນພື້ນຖານສາຍພົວພັນອັນສະໜິດແໜ້ນທາງດ້ານແນວຄິດ ແລະ ການເມືອງ, ໂດຍປັບປຸງຄວາມສາມັກຄີ ແລະ ຄວາມເປັນ ປຶກແຜ່ນໃຫ້ເຂັ້ມແຂງກວ່າເກົ່າ.

ເດືອນທຳອິດແຫ່ງການຄົງຕົວຢ່າງສະຫງ່າງາມ ຂອງພັກກອມມູນິດອິນດູຈີນໜຸ່ມນ້ອຍ, ການນຳພາຢ່າງໜັກແໜ້ນຂອງພັກ ໃນການລຸກຮື້ຂຶ້ນຄືພາຍຸລົມແດງຂອງມະຫາຊົນຜູ້ອອກແຮງງານຫວຽດນາມ ຕ້ານແອກຄອບຄອງລ່າເມືອງຂຶ້ນ ແລະ ຄວາມບໍ່ຍຸດຕິ–ທຳຂອງສັງຄົມນັ້ນ ໄດ້ແຜ່ຂະຫຍາຍໄປທົ່ວປະເທດໃນຊຸມປີ ໑໙໓໐–໑໙໓໑, ທັງໝົດນີ້ເປັນສິ່ງທີ່ອະນຸຍາດໃຫ້ປະທານໂຮ່ຈີມິນ ເວົ້າໄດ້ຢ່າງມີເຫດຜົນໃນເວລາຕໍ່ມາວ່າ: "ພໍແຕ່ກຳເນີດຂຶ້ນ ພັກກອມມູນິດອິນດູຈີນ ກໍ່ໄດ້ສະແດງຕົວເປັນພັກແບບໃໝ່ພັກໜຶ່ງ, ພັກເລນິນນິດອັນແທ້ຈິງ, ພັກແບບສູ້ຮົບຂອງຊົນຊັ້ນກຳມາຊີບຫວຽດນາມຜູ້ໜຸ່ມນ້ອຍ, ພັກທີ່ຮູ້ຈັກເຕົ້າໂຮມຊາວນາສ່ວນຫລວງຫລາຍ ແລະ ຊັ້ນຄົນຜູ້ອອກແຮງງານອື່ນໆເຂົ້າກັນ ຢູ່ພາຍໃຕ້ຄັນທຸງຂອງຕົນ".

ຖືກຈັບເທື່ອທຳອິດ

໑

ພາຍຫລັງທີ່ເດີນທາງໄປສະຫຍາມ ແລະ ມາເລເຊຍແລ້ວ, ຫງວຽນອາຍກວັກ (ເວລານັ້ນໃນໜັງສືເດີນທາງໃຊ້ຊື່ພະນັກງານຈີນຄົນໜຶ່ງວ່າ ຕົງເວີນເຊີ)ກໍກັບຄືນມາຮົ່ງກົງ. ຄົນຫວຽດນາມໝົດທັງຄະນະໄດ້ພັກຢູ່ເຮືອນເລກທີ ໑໘໖ ຖະໜົນ ສາມລຽງຂອງເກົາລູນ. ຢູ່ຮ່ວມກັບຫງວຽນອາຍກວັກ ແລະ ໂຮຕຸງເມົາ ທີ່ນັ້ນຍັງມີຊາຍໜຸ່ມ ຍິງໜຸ່ມທັງໝົດແປດຄົນ ຊຶ່ງທາງອົງຄະນະພັກສົ່ງມາແຕ່ຫວຽດນາມ ເພື່ອຮຽນການເມືອງ. ໃນຈຳນວນຄົນດັ່ງກ່າວ, ຫງວຽນອາຍກວັກ ມີຄວາມຍິນດີທີ່ຈະໄດ້ເຫັນ "ຫລານ" ຂອງເພິ່ນ ຊຶ່ງເປັນຮຸ່ນທຳອິດທີ່ຮຽນຢູ່ກວາງເຈົາ.

ຫງວຽນອາຍກວັກ ໄປຫາອີກຊຸມໜຶ່ງຂອງເກົາລູນຢູ່ເລື້ອຍໆ ຊຶ່ງຕັ້ງຫ່າງ ຈາກບ່ອນທີ່ຕົນພັກ ປະມານສອງສາມກິໂລແມັດ ຢູ່ບ່ອນນີ້ ຢູ່ໃນຊັ້ນທີສາມຂອງຕຶກເກົ່າ ຫລັງໜຶ່ງທີ່ກໍ້ດວຍຫີນ ແມ່ນສຳນັກງານຜູ້ຕາງໜ້າຂອງຄະນະເລຂາພາກຕາເວັນອອກ ຂອງ

ຄະນະບໍລິຫານງານສາກົນກອມມູນິດ ໂດຍມີຫ້ອງການຂອງບໍລິສັດຄ້າຂາຍແຫ່ງໜຶ່ງເປັນໜ້າສາກ. ຢູ່ໃນສຳນັກງານແຫ່ງນີ້ມີນາງສາວຫວຽດນາມສອງຄົນທຳໜ້າທີ່ ເປັນຜູ້ຕິດຕໍ່. ພວກນາງທັງສອງຕ່າງກໍຈູບຈ້າວຕິດຕາມຮ່ຳຮຽນ ຢູ່ຊຸດຮຽນການເມືອງ ຊຶ່ງບໍ່ຕ່າງຫຍັງກັບຄາວຢູ່ກວາງເຈົາ, ຜູ້ເປັນຕົວຕັ້ງຕົວຕີໃນຊຸດຮຽນດັ່ງກ່າວ ແທ້ຈິງແລ້ວ ແມ່ນ " ສະຫາຍເວືອງ". ນາງໜຶ່ງມີຜິວພັນດຳແດງ, ດວງຕາທັງຄູ່ໃຫຍ່, ຮອຍຍິ້ມ ເປີດເຜີຍ ແຂ້ວຂາວເປັນເງົາ, ຊື່ຂອງນາງຄື ມິງຄາຍ. ເວລານັ້ນ ອາຍຸຂອງຜູ້ນຳໃນອະນາຄົດຂອງອົງຄະນະພັກໄຊງ່ອນຫາກໍໄດ້ ໔໐ ປີ.

ຕົງເວິນເຊີ ຫຽວໄປຫຽວມາຕາມເສັ້ນທາງຮົ່ງກົງ-ຊຽງໄຮ້-ກວາງເຈົາ- ຮົ່ງກົງເປັນປະຈຳ. ຢູ່ໃນສອງນະຄອນຂອງຈີນ ທີ່ຢູ່ໃນອາລັກຂາ ຂອງຝະລັ່ງ ມີຄົນຫວຽດນາມທຳມາຫາກິນຢູ່ຢ່າງຫລວງຫລາຍ. ໃນຈຳນວນນັ້ນສ່ວນໃຫຍ່ແມ່ນທະຫານ ຍິງປືນຈາກບັກກີ ຊຶ່ງມີໜ້າທີ່ເວນຍາມຢູ່ຕາມອົງການສຳນັກງານຂອງຝະລັ່ງ ແລະ ຄົນໃຊ້ໃນຄອບຄົວຄົນຝະລັ່ງຜູ້ຮັ່ງມີ. ກ່ອນໜ້ານີ້ສະມາຄົມຊາວໜຸ່ມປະຕິວັດຫວຽດນາມຕັ້ງໜ້າເຄື່ອນໄຫວໃນໝູ່ຊາວຫວຽດນາມ ດັ່ງກ່າວ ແລະ ໃນປະຈຸບັນ ແມ່ນພັກເປັນຜູ້ສືບຕໍ່ເຄື່ອນໄຫວ. ຫງວຽນອາຍກວັກຊ່ວຍພວກເຂົາປັບປຸງການຈັດພິມໜັງສືພິມໃຕ້ດິນ ຂອງພັກ, ເພື່ອອະທິບາຍໃຫ້ຮູ້ເຖິງບາງບັນຫາ ກ່ຽວກັບສະຖານະການການເມືອງ ສະເພາະປະຈຸບັນ ແລະ ໜ້າທີ່ຂອງພັກ. ໃນລະຫວ່າງເດືອນທຳອິດ ຫລັງຈາກການສ້າງຕັ້ງພັກແລ້ວ, ອາການຂອງ "ພະຍາດໄຮ້ດຽງສາອຽງຊ້າຍ" ໄດ້ປະກົດຕົວຂຶ້ນຢ່າງຈະແຈ້ງໃນໝູ່ສະມາຊິກພັກຈຳນວນໜຶ່ງ ໂດຍສະເພາະໃນໝູ່ສະມາຊິກພັກທີ່ໄດ້ລີ້ໄພໄປຢູ່ຕ່າງປະເທດ ແຕ່ດົນແລ້ວ ແລະ ບໍ່ຮູ້ສະພາບການຕົວຈິງພາຍໃນປະເທດຫວຽດນາມ ພໍປານໃດ. ໂດຍປະເອີບໃຈນຳການສ້າງຕັ້ງພັກ ແລະ ຄວາມເຕີບໃຫຍ່ຂອງກຳລັງແຮງຂອງພັກ ມີນັກກອມມູນິດຫວຽດນາມຜູ້ໜຸ່ມນ້ອຍກະຫາຍຢາກກຳປືນຕໍ່ສູ້ ໃນທັນທີ ທັນໃດໂລດ. ສິ່ງນັ້ນມັນແມ່ນຈຸດພິເສດຂອງຝ່າຍ"ຊ້າຍ" ຢູ່ບາງປະເທດ ເຊັ່ນດຽວກັນ, ພິເສດແມ່ນຢູ່ພາກຕາເວັນອອກ.ພວກເຂົາເຈົ້າຮຽກຮອງໃຫ້ມີການສ້າງຕັ້ງ "ລະບອບສັງຄົມນິຍົມໃນດຽວນີ້ໂລດ" "ມອບອຳນາດໃຫ້ກຳມະກອນໃນທັນທີທັນໃດໂລດ". ຄຳຂວັນດັ່ງກ່າວນີ້ຂອງຝ່າຍ "ຊ້າຍ" ສ່ອງແສງໃຫ້ເຫັນການຂາດຄວາມອົດທົນ ;ແບບປະຕິວັດ ແລະ ບາງຄັ້ງຄາວກໍແມ່ນການສະແດງອອກເຖິງລັດທິສ່ຽງໄພແບບປະຕິວັດຂອງ ພວກເຂົາເຈົ້າ. ນອກຈາກນັ້ນ ຄຳຂວັນດັ່ງກ່າວນີ້ໄດ້ຮັບການສະໜັບສະໜູນຢ່າງເຕັມປ່ຽມ

ຈາກພວກທີ່ຫາກໍ່ເຂົ້າຮ່ວມການປະຕິວັດ. ຫງວຽນອາຍກວັກ ເດັດດ່ຽວ ແລະ ສູ້ຊົນອະທິບາຍຜົນເສຍຫາຍຂອງແນວຄິດດັ່ງກ່າວ ສຳລັບການປະຕິວັດປົດປ່ອຍຊາດຢູ່ອິນດູຈີນ . ເພິ່ນມັກເວົ້າໄວ້ວ່າ:

"ບໍ່ຄວນໃຊ້ສັບ "ຊົນຊັ້ນກຳມາຊີບ", "ຊົນຊັ້ນຊາວນາ", "ປົດປ່ອຍສັງຄົມ", "ລັດທິສັງຄົມນິຍົມ" ຢ່າງບໍ່ຖືກກາລະເທສະ. ປະຈຸບັນນີ້ ຫນ້າທີ່ຂອງພວກເຮົາ ແມ່ນການໂຄ່ນລົ້ມພວກລ່າເມືອງຂຶ້ນຝະລັ່ງ, ປົດປ່ອຍຊາດ ສະນັ້ນ ອັນສຳຄັນຄື ປູກລູກ ຫວນໄຟຮັກຊາດ ໃຫ້ລູກໄຫມ້ຢູ່ໃນຫົວໃຈຂອງຄົນຫວຽດນາມທຸກຄົນ".

ພ້ອມດຽວກັນ ຫງວຽນອາຍກວັກເອງຍາມໄດກໍຈົດຈຳ ແລະ ເຕືອນ ຄວາມຊົງຈຳຂອງບັນດາສະຫາຍຂອງເພິ່ນເລື້ອຍໆກ່ຽວກັບຄຳແນະນຳຂອງເລນິນ ທີ່ເວົ້າເຖິງຄວາມຈຳເປັນ "ຕ້ອງເດັດດ່ຽວປົກປ້ອງລັກສະນະເປັນເຈົ້າຕົນເອງ ຂອງຂະບວນການກຳມາຊີບ, ເຖິງແມ່ນວ່າຂະບວນການນັ້ນຍັງຢູ່ໃນຮູບການທີ່ຫາກໍເກີດໃຫມ່ກໍຕາມ "* .

ຫງວຽນອາຍກວັກ ເຫັນວ່າຫນ້າທີ່ສຳຄັນອັນດັບຫນຶ່ງຂອງພະນັກງານ ໂຄສະນາຂອງພັກແຕ່ລະຄົນ ແມ່ນເຮັດແນວໃດໃຫ້ມະຫາຊົນຜູ້ອອກແຮງງານຮູ້ຈັກຄວາມຈິງ ກ່ຽວກັບປະເທດທຳອິດທີ່ກໍ່ສ້າງສັງຄົມນິຍົມຄື ສະຫະພາບ ສາທາລະນະລັດ ສັງຄົມນິຍົມ ໂຊວຽດ. ໃນຕອນຕົ້ນປີ ໑໙໒໐ ເພິ່ນຕັດສິນໃຈຂຽນປຶ້ມເຫລັ້ມຫນຶ່ງ ທີ່ເວົ້າກ່ຽວກັບ ການດຳລົງຊີວິດຂອງປະຊາຊົນໂຊວຽດ. ໃນຄຳພາລົບ ເພິ່ນໄດ້ຂຽນວ່າ: "ຄົນຫວຽດນາມສ່ວນມາກແມ່ນຊາວຜູ້ອອກແຮງງານ ເຂົາເຈົ້າຢາກຮູ້ຈັກປະເທດລັດເຊຍ. ແຕ່ວ່າປຶ້ມ, ຫນັງສືພິມປະຕິວັດລ້ວນແຕ່ຖືກກົດຫມາຍຂອງຈັກກະພັດຝະລັ່ງເກືອດຫ້າມ. ອີກປະການຫນຶ່ງ ກຳມະກອນ ແລະ ຊາວນາຫວຽດນາມສ່ວນໃຫຍ່ແມ່ນກືກຫນັງສື. ພວກທີ່ໄດ້ຮຽນແດ່ເລັກນ້ອຍກໍ່ບໍ່ຮູ້ພາສາຫຍັງ ນອກຈາກພາສາຫວຽດນາມ. ດ້ວຍເຫດນັ້ນຫນ້າທີ່ ຂອງພວກຂ້າພະເຈົ້າຈຶ່ງແມ່ນຕ້ອງເວົ້າໃຫ້ພວກເຂົາເຈົ້າຮູ້ວ່າ ບ້ານເກີດເມືອງນອງຂອງຊົນຊັ້ນກຳມາຊີບ ເປັນຄືແນວໃດ. ເພື່ອຈະເຮັດວຽກນັ້ນໃຫ້ໄດ້, ຂ້າພະເຈົ້າມີຄວາມຕັ້ງໃຈຈະຂຽນປຶ້ມເປັນພາສາຫວຽດນາມຢ່າງບໍ່ຕ້ອງສົງໄສ ໃນຮູບການເລົ່າເລື່ອງ ທີ່ບັນຈຸເຫດການຈຳນວນຫລວງຫລາຍ ກ່ຽວກັບການທ່ອງທ່ຽວຂອງຂ້າພະເຈົ້າ. ຂ້າພະເຈົ້າຫວັງວ່າປຶ້ມຫົວນັ້ນຄົງຈະຫນ້າສົນໃຈ,ຫນ້າດຶງດູດ ແລະ ເຂົ້າໃຈງ່າຍ ".

---

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໔໑, ຫນ້າ ໑໖໗.(ເປັນພາສາລັດເຊຍ)

ປຶ້ມຂອງຫວງຽນອາຍກວັກທີ່ໃສ່ຊື່ວ່າ "ບັນທຶກປະຈຳວັນຂອງຜູ້ໄດ້ຮັບເຄາະຮ້າຍຈາກເຮືອຫລົ້ມ" ເລົ່າເລື່ອງກ່ຽວກັບເພື່ອນສາມຄົນຄືຄົນເອີລີບ, ຄົນອາຟະລິກາ ແລະ ຄົນຫວຽດນາມ ຊຶ່ງໄດ້ຮັບການຊ່ວຍຊີວິດ ຈາກຄົນໂຊວຽດ ໃນຂະນະທີ່ກຳປັ່ນຫລົ້ມ. ເພື່ອນສາມຄົນດັ່ງກ່າວ ໄດ້ຖືກສົ່ງໄປສະຫະພາບໂຊວຽດ. ພວກເຂົາເຈົ້າໄດ້ຮູ້ເຫັນກັບຕາ ບັນດາຜົນສຳເລັດຂອງປະຊາຊົນໂຊວຽດ ໃນການກໍ່ສ້າງສັງຄົມໃໝ່, ພວກເຂົາເຈົ້າໄດ້ລົງແກ່ວນກັບຄົນທີ່ "ການປະຕິວັດໄດ້ຫັນປ່ຽນຄົນທີ່ເຄີຍເປັນຂ້າທາດໃຫ້ ກາຍເປັນຄົນທີ່ມີອິດສະຫລະພາບ". ປຶ້ມຫົວນີ້ໄດ້ພິມເປັນຫລາຍໆເຫລັ້ມ ແລະ ຖືກແຈກຢາຍຢ່າງປິດລັບຢູ່ຫວຽດນາມ.

ພາຍຫລັງການສ້າງຕັ້ງພັກກອມມູນິດອິນດູຈີນໂດຍສະເພາະ ນັບຕັ້ງແຕ່ເວລາເລີ່ມຕົ້ນການລຸກຮື້ຂຶ້ນຢູ່ງຽງໂບ ເຈົ້າໜ້າທີ່ຕຳຫລວດເມືອງຂຶ້ນຝະລັ່ງ ໄດ້ສົ່ງນັກສືບສອດແນມ ອອກຊອກຄົ້ນສືບຖາມ ແລະ ຈັບກຸມບັນດາຜູ້ນຳຂອງພັກ. ໃນຊຸມປີດຽວກັນ "ອິງເຕຣໂປນ" ("ຕຳຫລວດສາກົນ") ສາຂາປະຈຳປະເທດເມືອງຂຶ້ນ ທີ່ປະກອບດ້ວຍສຳນັກງານນັກສືບອັງກິດ, ຝະລັ່ງ, ໂຮນລັງ ທ້າວຫັນຫວ່ານຕາໜ່າງໂຫດຫຽມ ຂອງຕົນອອກທົ່ວພາກໃຕ້ຈີນ ແລະ ບັນດາປະເທດອາຊີອາຄະເນ. ພວກເຂົາສົ່ງຂ່າວ ໃຫ້ກັນ ກ່ຽວກັບບັນດານັກປະຕິວັດຢູ່ບັນດາປະເທດເມືອງຂຶ້ນ, ກ່ອນອື່ນໝົດແມ່ນ ກ່ຽວກັບບຸກຄົນທີ່ມີການພົວພັນນຳສາກົນກອມມູນິດ; ພວກເຂົາແລກປ່ຽນນັກເຄື່ອນໄຫວໃຕ້ດິນ ທີ່ຕົກຢູ່ໃນຕາໜ່າງຂອງພວກເຂົາ. ຍົກຕົວຢ່າງ ໃນປີ ໑໙໒໕ ຟານໂບ້ຍເຈົາ ຖືກຈັບ ບົນດິນແດນຊຽງໄຮ ທີ່ຂຶ້ນກັບອັງກິດ ກໍ່ຍອມເລກັນທີ່ເຈົ້າໜ້າທີ່ຕຳຫລວດຝະລັ່ງ ແລະ ອັງກິດວາງອອກນຳກັນ. ສ່ວນວ່າພວກລ່າເມືອງຂຶ້ນຝະລັ່ງ ກໍ່ສະແດງນ້ຳໃຈຮູ້ບຸນຄຸນ ຕໍ່ເຈົ້າໜ້າທີ່ຕຳຫລວດອັງກິດ ດ້ວຍການມອບນັກຮັກຊາດອິນເດຍ ແລະ ພະມ້າ ຈຳນວນໜຶ່ງໃຫ້ແກ່ອັງກິດ.

ຫວງຽນອາຍກວັກ ແມ່ນຄົນທຳອິດ ໃນຈຳນວນຄົນທີ່ຖືກຈົດເຂົ້າໃນບັນຊີ ບຸກຄົນເຊິ່ງ "ອິງເຕຣໂປນ" ປະຈຳປະເທດເມືອງຂຶ້ນ ຕ້ອງຊອກຈັບໃຫ້ໄດ້. ເທື່ອໜຶ່ງຢູ່ ສະຫຍາມ ນັກສືບຝະລັ່ງສາມາດສືບຫາຮ່ອງຮອຍຂອງເພິ່ນ ແລະ ຕົກລົງກັນກັບອຳນາດປົກຄອງທ້ອງຖິ່ນໃຫ້ມອບສົ່ງຫວງຽນອາຍກວັກໃຫ້ພວກເຂົາ. ແຕ່ຫວງຽນອາຍກວັກ ຮູ້ກ່ອນຈຶ່ງປອມຕົວເປັນນັກບວດຕົບຕາພວກນັກສືບໄປໄດ້, ເພິ່ນຫລົບໜີຈາກການໄລ່ຈັບ ຂອງເຈົ້າໜ້າທີ່ຕຳຫລວດ ແລະ ໄດ້ໄປພັກຢູ່ວັດແຫ່ງໜຶ່ງ ເພື່ອລໍຖ້າໃຫ້ສະພາບກັບຄືນເປັນ

ປົກກະຕິ. ແຕ່ຢູ່ຮົງກົງ ພວກສັດຕູພັດໄດ້ຈັດວາງການປິດລ້ອມໄວ້ຢ່າງແໜ້ນໜາ.

ແຕ່ເຊົ້າມືດຂອງວັນທີ ໕ ເດືອນ ມິຖຸນາ ປີ ໑໙໖໑, ທັນໃດບານປະຕູ ຂອງເຮືອນຫລັງໜຶ່ງທີ່ຕັ້ງຢູ່ຖະໜົນສາມລຸມ ຖືກຕີຢ່າງແຮງ, ປະຕູເປີດອອກກະທັນຫັນ, ນາຍທະຫານອັງກິດຄົນໜຶ່ງ ແລະ ເຈົ້າໜ້າທີ່ຕຳຫລວດຈີນຈຳນວນໜຶ່ງຫລຸບເຂົ້າໃນຫ້ອງ.

ໂດຍໃຊ້ປືນສັ້ນນາບຂູ່ຄົນຫວຽດນາມທີ່ມີໜ້າຢູ່ໃນຫ້ອງ ນາຍທະຫານອອກຄຳສັ່ງວ່າ: ຍົກມືຂຶ້ນ, ຢືນຢູ່ກັບທີ່! ແຕ່ກໍໂຊກດີ, ເວລານັ້ນມີສອງຄົນເທົ່ານັ້ນຢູ່ໃນເຮືອນ ຄື ຫວຽນອາຍກວັກ ແລະ ລີ ຕານ ຊຶ່ງເປັນຍິງສາວອາຍຸ ໑໗ ປີ.

ການກວດຄົ້ນໄດ້ເລີ່ມຂຶ້ນ. ພວກເຈົ້າໜ້າທີ່ຕຳຫລວດໄດ້ຊອກຄົ້ນທົ່ວເຮືອນ ແຕ່ກ້ອງພື້ນເຮືອນຂຶ້ນໄປຮອດເພດານ. ພວກເຂົາທຸບຝາເຮືອນ ຮື້ດົນຂໍ ເພື່ອຊອກຫາ ອາວຸດ. ພວກເຂົາຈີກໂສ້ງເສື້ອ ຜ້າຫົ່ມ ໝອນ ຕັດກະທັ້ງກ້ອນສະບູ ເພື່ອຊອກຫາໜັງສືລັບ ແລະ ດິນລະເບີດ.

"ມີແຕ່ສອງຄົນເທົ່ານີ້ບໍອາໄສຢູ່ນີ້"? ນາຍທະຫານອ່ວາຍໜ້າມາຫາຫວຽນ - ອາຍກວັກ ແລະ ໃນຂະນະທີ່ຫວຽນງຶກຫົວ, ເຂົາພັດຊີ້ມືໃສ່ຫ້ອງໄວ້ອາຫານ. "ພວກເຈົ້າມີແຕ່ສອງຄົນ ເປັນຫຍັງຈຶ່ງສະສົມເຂົ້າ ເກືອໄວ້ຫລາຍຄືຈັ່ງຊີ້ແທ້ ?"

ການຊອກຄົ້ນກໍກິນເວລາອ່າວຄົນເຕີບ ແຕ່ພວກເຈົ້າໜ້າທີ່ຕຳຫລວດກໍບໍ່ພົບເຫັນ ວ່າມີຮ່ອງຮອຍອັນໃດພໍເປັນທີ່ສົງໄສ. ພວກເຂົາຊຸກສອງຄົນອອກຈາກເຮືອນ ແລະ ບັງຄັບໃຫ້ໄປຂຶ້ນລົດທີ່ມີປະຕູເປັນຕາໜ່າງເຫລັກປິດໄວ້ຢ່າງແໜ້ນໜາ ຊຶ່ງຈອດໄວ້ ໃນ ຮ່ອມຮຽບຮ້ອຍແລ້ວ. ລົດຄັນດັ່ງກ່າວແລ່ນມຸ່ງໜ້າໄປທີ່ປ້ອມຕຳຫລວດຮົງກົງ ແລະ ຢູ່ ບ່ອນນີ້ ພວກເຂົາຖືກຂັງໄວ້ຄົນລະຫ້ອງ.

ເປັນຍ້ອນຫຍັງ ຄົນທີ່ຮູ້ວິທີຮັກສາຄວາມປອດໄພໄດ້ເປັນຢ່າງດີ ຫວຽນອາຍກວັກ ຈຶ່ງຖືກເຈົ້າໜ້າທີ່ຕຳຫລວດຈັບໄດ້ຢ່າງບໍ່ຮູ້ສຶກຕົວ, ນອກນັ້ນພວກຕຳຫລວດຍັງ ຮູ້ຈັກທີ່ພັກ ແລະ ເວລາທີ່ເພິ່ນຢູ່ເຮືອນອີກ? ຕໍ່ບັນຫານີ້ມີຫລາຍສົມມຸດຖານ. ອີງຕາມ ຂໍ້ ສົມມຸດຖານໜຶ່ງ ຄືເມື່ອວັນທີ ໓໐ ເດືອນເມສາ ປີ ໑໙໖໑, ເຈົ້າໜ້າທີ່ຕຳຫລວດຝະລັ່ງພາກັນກວາດລ້າງຢູ່ທີ່ຊຸມກຳມະກອນຊານເມືອງໄຊງ່ອນ. ໃນຈຳນວນຜູ້ທີ່ຕົກຖືກແຮ້ວ ຂອງນັກສືບນັ້ນມີຫວຽນທາຍ ຊຶ່ງເປັນສະມາຊິກພັກກອມມູນິດອິນດູຈີນຄົນໜຶ່ງ. ເມື່ອ ທຳການກວດຄົ້ນ ນັກສືບໄດ້ພົບຈົດໝາຍຂອງຫວຽນອາຍກວັກທີ່ເຊື່ອງໄວ້ ຢູ່ໜ້າເອິກ ຂອງ ຫວຽນທາຍ, ທີ່ຂຽນເຖິງຄະນະບໍລິຫານງານສູນກາງພັກ. ໃນຈົດໝາຍ ໄດ້

ບອກແຈ້ງວ່າ ຜູ້ຂຽນໄດ້ອາໄສຢູ່ຮົງກົງແຕ່ດົນແລ້ວ. ຕໍ່ມາບໍ່ດົນກະຊວງອານານິຄົມຢູ່ປາຣີກໍໄດ້ຮັບໂທລະເລກດ່ວນຈາກແມັກແລັງ ຂ້າຫລວງໃຫຍ່ຂອງອິນດູຈີນ ເອກະສານ ໄດ້ແຈ້ງໃຫ້ຮູ້ວ່າ ພວກເຂົາໄດ້ສືບຮູ້ທີ່ພັກຂອງຫງວຽນອາຍກວັກແນ່ນອນແລ້ວ.

ວັນທີ ໘ ເດືອນມິຖຸນາ, ຫນັງສືພິມສິງກະໂປຕໍ່ຈາກນັ້ນ ຫນັງສືພິມອັງກິດໄດ້ພາກັນອອກຂ່າວໃຕ້ຫົວຂໍ້ທີ່ຄຶກໂຄມວ່າ: "ເຈົ້າຫນ້າທີ່ຕຳຫລວດສິງກະໂປໄດ້ຈັບ ເລີຟະຮັງ (ຜູ້ດຽວກັບດຸຊຸ) "ຜູ້ກວດກາ" ຂອງສາກົນກອມມູນິດ. ຫນັງສືພິມຕ່າງລົງຂ່າວ ດ້ວຍຄວາມຍິນດີວ່າ ການຈັບໄດ້ກະກຽມຢ່າງ "ຍອດຢ້ຽມທີ່ສຸດ" ເປັນເລື່ອງທີ່ເລີຟະຮັງ ບໍ່ຄາດຄິດມາກ່ອນດັ່ງນັ້ນ ເລີຟະຮັງຈຶ່ງບໍ່ທຳລາຍເອກະສານ ຊຶ່ງເຜີຍແຜ່ໃຫ້ເຫັນ ບາງດ້ານໃນການເຄື່ອນໄຫວຂອງສາກົນກອມມູນິດຢູ່ອາຊີອາຄະເນ. ໄດ້ມີການຄາດຄະເນວ່າ ຢູ່ໃນຈຳນວນ "ເອກະສານ" ດັ່ງກ່າວ ໄດ້ມີຫນັງສືຊວງຂຽນທີ່ຢູ່ຂອງຫງວຽນ ອາຍກວັກ ເພາະວ່າ ກ່ອນຫນ້ານັ້ນ ເລີຟະຮັງ ອາດໄດ້ພົບຫງວຽນອາຍກວັກ ຢູ່ຮົ່ງກົງຢ່າງແນ່ນອນ.

ແຕ່ວ່າຍັງມີຂໍ້ສັນນິຖານ ຂໍ້ທີສາມທີ່ເບິ່ງຄືວ່າມີຄວາມຈິງຫລາຍກວ່າຫມູ່. ຄືດັ່ງຮູ້ກັນໃນເວລາຕໍ່ໆມາ ໃນຊຸມປີດັ່ງກ່າວ ມີນັກສືບຄົນຫນຶ່ງຊື່ວ່າ ເລິມດິກຫູ ໄດ້ເລັດລອດເຂົ້າຢູ່ໃນຖັນແຖວນັກຮັກຊາດຫວຽດນາມ ທີ່ກຳລັງເຄື່ອນໄຫວຢູ່ພາກໃຕ້ຈີນ. ເລິມດິກຫູໄປເຖິງກວາງເຈົາ ລະຫວ່າງຕົ້ນປີ ໑໙໒໔ ແລະ ໄດ້ຕັ້ງຫນ້າເຂົ້າຮ່ວມ ການເຄື່ອນໄຫວປະຕິວັດຂອງຊາວຫວຽດນາມຕ່າງດ້າວຢູ່ແຫ່ງນີ້. ນັບຕັ້ງແຕ່ເວລານັ້ນມາ ພຶດຕິກຳບາງຢ່າງຂອງເລິມດິກຫູ ໄດ້ເຮັດໃຫ້ຫລາຍຄົນເກີດຄວາມສົງໄສ. ເຂົາສ້າງຄອບຄົວກັບລູກສາວພໍ່ຄ້າຈີນຄົນຫນຶ່ງທີ່ຮັ່ງມີ, ດຳລົງຊີວິດແບບສະຫນຸກສະບາຍ, ເສເພ ຂີ້ສໍ ຂີ້ໂກງ. ຫລາຍປີຕໍ່ມາ ຈຶ່ງຮູ້ວ່າເຂົາໄດ້ພົວພັນກັບກົງສູນຝະລັ່ງຢູ່ຮົ່ງກົງ. ພວກຝະລັ່ງສົ່ງໃຫ້ ຫູເປີດຮ້ານຖ່າຍຮູບຢູ່ແຫ່ງນີ້ ແລະ ທັງໄດ້ຕອບສະຫນອງທຶນຮອນທີ່ຈຳເປັນ. ເຂົາໄດ້ເວົ້າກັບບັນດາສະຫາຍທີ່ເຄື່ອນໄຫວໃຕ້ດິນວ່າ ການທີ່ເຂົາເປີດຮ້ານຖ່າຍຮູບ ກໍເພື່ອສ້າງຄັງໃຫ້ພັກ ແລະ ທັງເປັນບ່ອນພົບພໍ້ທີ່ປິດລັບຂອງພັກ. ແຕ່ໃນຕົວຈິງຮ້ານນີ້ແມ່ນສະຖານທີ່ຊ່ວຍເຂົາລັກຖ່າຍຮູບນັກຮັກຊາດຫວຽດນາມ ຕາມຄຳສັ່ງຂອງສຳນັກງານ ນັກສືບຝະລັ່ງ ແລະ ທັງໄດ້ມອບຮູບພ້ອມດ້ວຍຊື່ຂອງພວກເຂົາເຈົ້າໃຫ້ແກ່ກົງສູນຝະລັ່ງ. ຢູ່ໃນບັນດາຜູ້ທີ່ຕົກຖືກແຮ້ວນີ້ ມີຫງວຽນອາຍກວັກຮ່ວມຢູ່ດ້ວຍ. ກົງສູນຝະລັ່ງໄດ້ຮັບຮອນສົ່ງຂ່າວຄາວກ່ຽວກັບບ່ອນຢູ່, ໂດຍເນັ້ນຫນັກເຖິງຄວາມ "ອັນຕະລາຍ" ຂອງ ຫງວຽນ

ອາຍກວັກ ຊຶ່ງຈະເປັນໄພແກ່ລາຊະອານາຈັກອັງກິດໃຫ້ເຈົ້າໜ້າທີ່ຕຳຫລວດອັງກິດ ຢູ່ຮົ່ງກົງ.

ພາຍລຸນມາ ເມື່ອທວນຄືນເຖິງສາເຫດທີ່ພາໃຫ້ເກີດການຈັບກູມຢູ່ຮົ່ງກົງ ປະທ່ານໂຮ່ຈີມິນ ກໍສະຫລຸບແບບດຽວກັນ. ພາຍຫລັງການປະຕິວັດເດືອນສິງຫາ ໄດ້ຮັບໄຊຊະນະຢູ່ຫວຽດນາມແລ້ວ ເລີມດິກທູ ຄິດວ່າບໍ່ມີໃຜຮູ້ວ່າເຂົາເປັນຜູ້ທໍລະຍົດ ຈຶ່ງຮີບຮ້ອນກັບຄືນປະເທດຊາດ ໃນນາມເປັນ "ເພື່ອນຮ່ວມຮົບຄົນເກົ່າ" ຂອງປະທານ ໂຮ່ຈີມິນ, ເຂົາໄປພົບເພິ່ນຢູ່ສຳນັກງານປະທານປະເທດ ເພື່ອສະແດງນ້ຳໃຈຕຽມພ້ອມຊ່ວຍເຫລືອອຳນາດໃໝ່ປະຕິວັດ. ປະທານໂຮ່ຈີມິນ ທີ່ບໍ່ເຄີຍ ລືມເຖິງເລື່ອງແກ້ແຄ້ນ ໄດ້ແນມເບິ່ງເຂົາດ້ວຍຄວາມເຢືອກເຢັນແລ້ວເວົ້າວ່າ:

"ຜູ້ໃດຄຽດໝາກ, ຜູ້ນັ້ນກໍສົບແດງ. ບັດນີ້ເຈົ້າເຫັນແລ້ວຕິ ເຖິງວ່າ ເຈົ້າໄດ້ທຳລາຍມ້າງເພພາລະກິດຂອງພວກຂ້ອຍກໍຕາມ ແຕ່ການປະຕິວັດກໍຍັງໄດ້ຮັບໄຊຊະນະ".

໖

ອີງຕາມແຜນການທີ່ສຳນັກງານນັກສືບຝະລັ່ງ ແລະ ອັງກິດພາກັນວາງອອກ ວ່າ ຫລັງຈາກພວກອັງກິດຈັບຫງວຽນອາຍກວັກໄດ້ນັ້ນ, ພວກເຂົາຕ້ອງລາຍງານດ່ວນໃຫ້ອຳນາດປົກຄອງຝະລັ່ງຮູ້ ເພື່ອໃຫ້ພວກເຂົາສົ່ງກຳປັ່ນໄປລໍຖ້າຢູ່ຮົ່ງກົງ ແລະນຳຕົວຫງວຽນອາຍກວັກກັບຄືນຫວຽດນາມຢ່າງປິດລັບ, ແລ້ວຢູ່ພູ້ນ, ອຳນາດປົກຄອງຝະລັ່ງກະວ່າຈະປະຫານຊີວິດຫງວຽນອາຍກວັກຕາມທີ່ໄດ້ປະກາດໄວ້ແລ້ວ ເພື່ອບໍ່ໃຫ້ ຄວາມຫຍຸ້ງເຫຍີງຍືດຍາວຕໍ່ໄປອີກ ແລະ ຫລີກເວັ້ນທາງສຽງອຶກກະທຶກຄຶກໂຄມ. ຍ້ອນມີຄວາມຄິດແນວນີ້ ຕົວໜ້າຕຳຫລວດຮົ່ງກົງຜູ້ທີ່ນຳພາການກວາດລ້າງຢູ່ຖະໜົນສາມຈຸງນັ້ນ ຈຶ່ງບໍ່ໄດ້ຂໍຄຳສັ່ງຈາກໄອຍະການ ທີ່ສັ່ງໃຫ້ຈັບຄົນຕ່າງດ້າວ. ເຂົານຶກຄຶດຢ່າງມີເຫດຜົນວ່າ ທາງທີ່ດີ ບໍ່ຄວນຮັກສາເອກະສານທີ່ເປັນຫລັກຖານໄວ້ອີກ ເພາະວ່າເອກະສານດັ່ງກ່າວ ອາດຈະເປັນໄພແກ່ເຂົາໃນພາຍລຸນ.

ໃນເບື້ອງຕົ້ນ ວຽກທຸກຢ່າງດຳເນີນລຸລ່ວງໄປໄດ້ດັ່ງທີ່ຄາດໄວ້. ພໍແຕ່ສອງ ວັນຜ່ານໄປ, ຢູ່ປາຣີ ຢູ່ໜ້າໂຕະເຮັດວຽກຂອງລັດຖະມົນຕີກະຊວງອານານິຄົມຝະລັ່ງໄດ້

ມີໂທລະເລກຂອງ ແມັກແລັງ ທີ່ແຈ້ງໃຫ້ຮູ້ວ່າ ຫວງວຽນອາຍກວັກ "ນັກເຄື່ອນໄຫວການເມືອງຫົວຮຸນແຮງ ແລະ ສັດຕູໂຕອັນຕະລາຍ" ໄດ້ຖືກຈັບຢູ່ຮົ່ງກົງແລ້ວ ແລະ ການຈັບກຸມຄັ້ງນີ້ຖືວ່າສຳຄັນທີ່ສຸດ ເພື່ອຮັບປະກັນ "ຄວາມປອດໄພຂອງອິນດູຈີນ". ຢູ່ທ່າເຮືອໄຮຟອງ ກຳປັ່ນຝະລັ່ງລຳໜຶ່ງໄດ້ດຶງສະໝໍອັນແລ່ນມຸ່ງໜ້າໄປຮົ່ງກົງ. ກຳປັ່ນລຳນີ້ ມີໜ້າທີ່ຮັບເອົາບຸກຄົນທີ່ "ກໍ່ຄວາມວຸ້ນວາຍ" ຊຶ່ງກຳລັງຖືກຄຸມຂັງ ໂດຍປາສະຈາກຄວາມຫວັງທີ່ຈະໄດ້ຮັບການຊ່ວຍເຫຼືອໃດໆຈາກພາຍນອກ ຢູ່ໃນຫ້ອງຂັງດ່ຽວ ຂອງສະຖານີຕຳຫຼວດຮົ່ງກົງ. ໜັງສືພິມນາຍທຶນຝະລັ່ງຕ່າງກໍ່ບໍ່ໄດ້ປິດບັງຄວາມດີໃຈ. ວັນທີ ໗ ເດືອນ ກໍລະກົດ ໜັງສືພິມ "ໂອປີຍົງ" ຢູ່ໄຊ່ງ່ອນລົງຂ່າວວ່າ: " ດ້ວຍການຊ່ວຍເຫຼືອຂອງສຳນັກງານນັກສືບອັງກິດ, ຝ່າຍອັງກິດໄດ້ຈັບຫວງວຽນອາຍກວັກ ໄວ້ໃນກຳມືຄືເດັດດອກໄມ້ຊຸ້ນລະ. ຄົນນີ້ແມ່ນເຫຍື່ອທີ່ຫາຍາກທີ່ສຸດ ແລະ ພວກເຮົາຄວນສະແດງນ້ຳໃຈຮູ້ບຸນຄຸນເພື່ອນຄົນອັງກິດ ເພາະວ່າຍ້ອນການກະທຳດັ່ງກ່າວ ກອງເສນາທິການກອມມູນິດຢູ່ທີ່ອິນດູຈີນ ຖືກຈັບຢ່າງໝົດກ່ຽງ ແລະ ພັກກອມມູນິດທັງໝົດ ໄດ້ເຊົາເຄື່ອນໄຫວແລ້ວ".

ເຖິງຢ່າງໃດກໍດີ ກໍ່ມີຜູ້ທີ່ໃຫ້ການຊ່ວຍເຫຼືອ ທີ່ມາຈາກຝ່າຍທີ່ນຶກບໍ່ເຖິງ ຈັກດີ້. ຝະລັ່ງຊິດ ລົດສະບາຍ ນັກກົດໝາຍອັງກິດ ທີ່ມີຊື່ສຽງຫຼາຍສົມຄວນ ຢູ່ຮົ່ງກົງ ໃນເວລານັ້ນ ແລະ ທັງເປັນຫົວໜ້າຫ້ອງການນັກກົດໝາຍທີ່ມີອຳນາດເປັນຜູ້ ທີ່ມີທັດສະນະອຽງຊ້າຍ ໄດ້ທຳລາຍແຜນການຂອງເຈົ້າໜ້າທີ່ຕຳຫຼວດ. ເພິ່ນລຶ້ງເຄີຍ ກັບຊາວຫວຽດນາມຮັກຊາດ ແລະ ມີເທື່ອໜຶ່ງທີ່ເພິ່ນກໍ່ຮັບການສູ້ຄະດີ ແລະ ຊ່ວຍເຫຼືອ ນັກຮົບປະຕິວັດຫວຽດນາມຄົນໜຶ່ງທີ່ຖືກຈັບ ໃຫ້ພົ້ນຈາກອັນຕະລາຍ. ເມື່ອບັນດາຜູ້ຕາງໜ້າຂອງຄະນະເລຂາພາກຕາເວັນອອກຂອງສາກົນກອມມູນິດໄດ້ຮູ້ຂ່າວກ່ຽວກັບ ການຈັບກຸມຫວງວຽນອາຍກວັກແລ້ວ, ພວກເຂົາເຈົ້າໄດ້ຮ້ອງຂໍໄປຍັງ ລົດສະບາຍ ໃຫ້ເພິ່ນແກ້ຄະດີຂອງນັກປະຕິວັດຫວຽດນາມຄົນນີ້.

ນັກກົດໝາຍຄົນນີ້ໄດ້ຮັບປາກວ່າ ຈະເຮັດທຸກສິ່ງທຸກຢ່າງ ເພື່ອຊ່ວຍຊີວິດຜູ້ທີ່ຖືກຈັບ ຫຼືວ່າຢ່າງນ້ອຍຊ່ວຍໃຫ້ຫຼຸດພົ້ນໂທດ. ມື້ດຽວກັນເພິ່ນໄດ້ໄປຍັງສະຖານີ ຕຳຫຼວດ ແລະໃນນາມເປັນທະນາຍຄວາມເພິ່ນຂໍອະນຸຍາດເຂົ້າພົບຄົນຕ່າງປະເທດຜູ້ໜຶ່ງ ທີ່ຫາກໍ່ຖືກຈັບຊື່ວ່າ ຕົງເວິນເຊີ. ການຢ້ຽມຢາມຂອງ ລົດສະບາຍ ໃນຄັ້ງນີ້ ປຽບສະເໝືອນຕັກເອົານ້ຳເຢັນໆໂພະໃສ່ຫົວພວກເຈົ້າໜ້າທີ່ຕຳຫຼວດ. ພວກເຂົາບໍ່ຄາດວ່າ ການຈັບ

ກຸມ ຊຶ່ງແມ່ນພວກເຂົາດຳເນີນມານັ້ນເບິ່ງຄືວ່າຢ່າງຄ່ອງແຄ້ວ ແລະ ປິດລັບທີ່ສຸດ ສາມມື້ຕໍ່ມາມັນບໍ່ເປັນຄວາມລັບອີກແລ້ວ ສຳລັບທະນາຍຄວາມທີ່ມີຊື່ສຽງດີເພິ່ນຢູ່ຮົງກົງ.ພວກເຂົາບໍ່ອາດຈະອະນຸຍາດໃຫ້ລົດສະບາຍເຂົ້າພົບໄດ້, ເພາະຖ້າທະນາຍຄວາມຄົນນີ້ຮູ້ວ່າຕົງເວີນເຊີ ຖືກຈັບຢ່າງຜິດກົດໝາຍ ໂດຍປາສະຈາກຄຳສັ່ງຂອງໄອຍະການ ກໍແຮ່ງຈະເຮັດໃຫ້ລົດສະບາຍ ເດັດດ່ຽວເຂົ້າແຊກແຊງໃນຄະດີນີ້ ແລະ ແຜນການທີ່ພວກເຂົາທີ່ໄດ້ວາງອອກພ້ອມກັບເຈົ້າໜ້າທີ່ຕຳຫລວດຝະລັ່ງ ກໍຈະຖືກທັບມ້າງໃນທັນໃດໂລດ.ສະນັ້ນ ລົດສະບາຍຈຶ່ງບໍ່ໄດ້ພົບກັບຜູ້ຖືກຈັບ ໂດຍປາສະຈາກຄຳອະທິບາຍເຫດຜົນ.

ເນື່ອງຈາກຮູ້ຢູ່ແລ້ວວ່າ ນັກກົດໝາຍທີ່ມີຊື່ສຽງຜູ້ນີ້ຈະບໍ່ປະລະຄວາມຕັ້ງໃຈ ຈັກເທື່ອ, ຫົວໜ້າຕຳຫລວດຈຶ່ງປ່ອຍດ່າສາບແຊ່ງເຫດການທີ່ຜັນແປຢ່າງບໍ່ຄາດຄິດມາກ່ອນແລ້ວຈຳເປັນຕ້ອງໄດ້ລາຍງານຂຶ້ນເທິງ ກ່ຽວກັບການທີ່ເຂົາສັ່ງໃຫ້ຈັບຄົນອິນດູຈີນ ຜູ້ໜຶ່ງ. ຕາມລາຍງານຂອງເຂົາ, ຄຳສັ່ງຈັບ ທີ່ມີລາຍເຊັນຂອງຜູ້ສຳເລັດລາຊະການ-ຮົງກົງນັ້ນ ລົງວັນທີ ທີ່ບໍ່ກົງກັນມື້ຈັບ ແລະ ດັ່ງນັ້ນໃນເອກະສານທາງການ "ກ່ຽວກັບຄະດີຕົງເວີນເຊີ ແລະ ນາງລີຕາມ", ວັນລົງມືຈັບນັ້ນຈຶ່ງແມ່ນວັນທີ ໑໘ ເດືອນມິຖຸນາ ປີ ໑໙໓໑.

ເຖິງຢ່າງໃດກໍດີ, ລົດສະບາຍ ກໍຍັງສືບຕໍ່ຮຽກຮ້ອງໃຫ້ໄດ້ພົບຕົງເວີນເຊີຈົນໄດ້ ແລະ ສຸດທ້າຍ ມາຮອດເທື່ອທີສາມ ເມື່ອສຳນັກງານນັກສືບໄດ້ "ເຮັດໃຫ້ ການຈັບກຸມຫງວຽນຖືກຕ້ອງຕາມກົດໝາຍ" ແລະ ໄດ້ເຮັດໃຫ້ມີລະບຽບແບບແຜນອັນຈຳເປັນ ຈຶ່ງເປັນໂອກາດໃຫ້ນັກກົດໝາຍໄດ້ເຂົ້າພົບຜູ້ທີ່ຖືກຈັບ. ຢູ່ໃນຫ້ອງພົບຜູ້ທີ່ຢືນຢູ່ຕໍ່ໜ້າ ທະນາຍຄວາມແມ່ນຄົນຈ່ອຍຜອມ ໄອແຫ້ງໆ, ບົນໃບໜ້າຂອງເພິ່ນມີແຕ່ ດວງຕາ ທັງຄູ່ເທົ່ານັ້ນທີ່ມີແວວສົດໃສ. ພາຍລູນມາ ລົດສະບາຍໄດ້ເລົ່າຄືນວ່າ ທຳອິດ ຕົງເວີນເຊີເຮັດໃຫ້ເພິ່ນເກີດມີຈິດໃຈເມດຕາສົງສານຢ່າງເລິກເຊິ່ງ, ແຕ່ພາຍຫລັງການສົນທະນາກັນເຄິ່ງຊົ່ວໂມງ ເພິ່ນເກີດຄວາມຮູ້ສຶກນັບຖື, ນິຍົມຊົມຊອບ ແລະ ປາຖະໜາຢາກຊ່ວຍເຫລືອບຸກຄົນທີ່ມີພະລັງດູດດຶງຄົນນີ້ຈົນໄດ້.

" ລົດສະບາຍເລີ່ມເວົ້າໃນເວລາທີ່ເພິ່ນ ແລະ ຕົງເວີນເຊີນັ່ງ ເຊິ່ງໜ້າກັນຢູ່ໂຕະຍາວໃນຫ້ອງເຂົ້າຢ້ຽມນັກໂທດວ່າ: "ໜຶ່ງໃນບັນດາເພື່ອນຮ່ວມອາຊີບຂອງຂ້າພະເຈົ້າ ໄດ້ຊ່ວຍຊີວິດ ຊຸນ ຢັດເຊັນ ທີ່ຖືກສັດຕູຈັບກຸມຢູ່ລອນດອນ. ມາບັດນີ້ ຂ້າພະເຈົ້າຢາກຊ່ວຍເຫລືອທ່ານ ສະນັ້ນ ຂ້າພະເຈົ້າຈຶ່ງສະເໜີທ່ານຈົ່ງເຊື່ອໝັ້ນຂ້າພະເຈົ້າ.ແຕ່

ມີເງື່ອນໄຂຢູ່ບ່ອນວ່າ ທ່ານຕ້ອງເລົ່າໝົດທຸກສິ່ງທຸກຢ່າງ ທີ່ພົວພັນນຳຄະດີຂອງທ່ານໃຫ້ຂ້າພະເຈົ້າຟັງ. ມັນຈະສ້າງຄວາມສະດວກໃຫ້ຂ້າພະເຈົ້າໄປແກ້ຄວາມທ່ານຢູ່ສານ. ຂ້າພະເຈົ້າຈະບໍ່ສັ້ຖາມຫລາຍອັນທີ່ຢູ່ນອກຂົງເຂດອັນຈຳເປັນ ເພາະວ່າຂ້າພະເຈົ້າເຂົ້າໃຈດີວ່າມັກປະຕິບັດແຕ່ລະຄົນ ລ້ວນແຕ່ມີຄວາມລັບສະເພາະຂອງຕົນ.

ຫລັງຈາກທີ່ຕົງເວີນເຊີເລົ່າຂໍ້ມູນອັນຈຳເປັນກ່ຽວກັບການຈັບກຸມສູ່ ລົດສະບາຍຟັງ ແລະ ຫລັງຈາກພ້ອມກັນວາງວິທີແກ້ຄະດີແລ້ວ(ເຊິ່ງໃນນັ້ນສິ່ງສຳຄັນແມ່ນບໍ່ປ່ອຍໃຫ້ຕົງເວີນເຊີ ຖືກມອບໃຫ້ແກ່ອຳນາດປົກຄອງຝະລັ່ງ) ທະນາຍຄວາມກັບມາເຮືອນ ເພື່ອກະກຽມເອກະສານອັນຈຳເປັນ, ບັດແລ້ວສິ່ງສຳນວນຄະດີຂຶ້ນສານສູງສຸດຂອງຮົ່ງກົງ.

ການພິຈາລະນາຄະດີດຳເນີນໄປຢ່າງເປີດເຜີຍ. ແຕ່ຢູ່ໃນສານ ແລະອ້ອມແອ້ມສານໄດ້ຈັດໃຫ້ມີການເວນຍາມ ເພື່ອປ້ອງກັນໃນກໍລະນີທີ່ "ນັກໂທດອັນຕະລາຍ" ໂຕນໜີ. ການພິຈາລະນາຄະດີດຳເນີນໄປ ໂດຍປະຕິບັດຕາມປະເພນີອັນຍາວນານ ຫລາຍສະຕະວັດຂອງສານອັງກິດ. ຜູ້ພິພາກສານັ່ງຢູ່ເຄິ່ງກາງ ຊຶ່ງເປັນທີ່ນັ່ງສູງກວ່າ ໝົດທຸກຄົນ, ສ່ວນບັນດາຜູ້ຊ່ວຍວຽກຂອງເພິ່ນ ແລະ ບັນດາທະນາຍຄວາມນຸ່ງເສື້ອຄຸມດຳ ໃສ່ຜົມປອມ. ຢູ່ເທິງໂຕະ ຢູ່ຕໍ່ໜ້າພວກເຂົານັ້ນ ແມ່ນປຶ້ມກົດໝາຍຫົວໃຫຍ່. ທະນາຍຄວາມຝ່າຍຈຳເລີຍ ແລະ ໂຈດຕ່າງກໍເປີດປຶ້ມກົດໝາຍດັ່ງກ່າວນັ້ນ ເພື່ອຈະຍົກເອົາບາງມາດຕາອັນຈຳເປັນມາເປັນບ່ອນຢັ້ງຢືນເຫດຜົນຂອງຕົນ. ຢູ່ສານ ມີແຕ່ໂຈດ ກັບທະນາຍຄວາມຝ່າຍຈຳເລີຍເທົ່ານັ້ນມີສິດໃຫ້ການໄດ້. ຈຳເລີຍ ແລະ ທະນາຍຄວາມຂອງເຂົາຖາມ ແລະ ຕອບກັນດ້ວຍການຂຽນໜັງສື. ລົດສະບາຍເປັນທະນາຍຄວາມຜູ້ຕົ້ນຕໍຂອງຄະດີຕົງເວີນເຊີ, ນອກນັ້ນມີ ດຣ. ຊັງກິງ ເພື່ອນຮ່ວມອາຊີບຂອງ ນັກກົດໝາຍລົດສະບາຍ ວ່າຄວາມນຳອີກ.

"ເປັນຄັ້ງທີສອງ ທີ່ຂ້າພະເຈົ້າພົບຕົງເວີນເຊີແມ່ນໃນຂະນະທີ່ເພິ່ນຢູ່ໃນສານ", ລົດສະບາຍເລົ່າຄືນ, "ຕົງເວີນເຊີ ຢືນຢູ່ທາງຫລັງຄອກເຫລັກໃກ້ໆກັບແປ້ນມ້າ ສຳລັບຈຳເລີຍ ແລະ ຂ້າພະເຈົ້າສັງເກດເຫັນວ່າ ເພິ່ນຖືກໃສ່ກັບມື. ຂ້າພະເຈົ້າເວົ້າບັນຫານັ້ນນຳຊັງກິງ. ສ່ວນຊັງກິງອ່ວາຍໜ້າໄປເບື້ອງຜູ້ພິພາກສາ ແລະ ຂໍຮ້ອງໃຫ້ຈຳເລີຍຍົກແຂນຂຶ້ນໃຫ້ສານໄດ້ເຫັນ. ຕົງເວີນເຊີ ຍົກແຂນສອງເບື້ອງທີ່ຖືກກັບມືຂຶ້ນ, ແລ້ວ ຊັງກິງ ກໍເວົ້າຂຶ້ນພ້ອມບາດວ່າ: ກົດໝາຍບົ່ງໄວ້ວ່າ ຈຳເລີຍທີ່ຖືກນຳຂຶ້ນສານຕ້ອງບໍ່ ຖືກໃສ່ກັບມື. ຜູ້ພິພາກສາຈຳເປັນຕ້ອງອອກຄຳສັ່ງໃຫ້ຖອດກັບມືອອກຈາກມືຂອງ ຕົງເວີນ-

ເຊີ. ພາຍຫລັງທີ່ຄຳສັ່ງດັ່ງກ່າວຖືກປະຕິບັດແລ້ວ, ຊຶ່ງກໍຈຶ່ງເລີ່ມວ່າຄວາມ".

ໜ້າທີ່ຂອງທະນາຍຄວາມສັບສົນທີ່ສຸດ. ໂຈດ ກ່າວຫາ ຕຶງເວິນເຊີ ຕາມແບບສະບັບໃນສະໄໝນັ້ນ ຊຶ່ງເປັນແບບທີ່ພວກນາຍທຶນຢູ່ຫລາຍປະເທດເຄີຍໃຊ້ ໃນການຕໍ່ສູ້ກັບນັກປະຕິວັດເຊັ່ນ: ຈຳເລີຍເປັນ "ນັກໂບນເຊວິກ" ເປັນ "ນັກສືບຂອງມິດສະກູ" ທີ່ມາຮົ່ວກົງ ເພື່ອ"ໂຄ່ນລົ້ມອຳນາດປົກຄອງຂອງລາຊະອານາຈັກອັງກິດ". ໂຈດທວງໃຫ້ຕັດສິນລົງໂທດຈຳເລີຍດ້ວຍການຂັງຄຸກຫລາຍປີ ຫລື ຢ່າງໜ້ອຍ ກໍຕ້ອງເນລະເທດຈຳເລີຍໄປອິນດູຈີນ ເພາະວ່າຢູ່ອິນດູຈີນຈຳເລີຍ ໄດ້ຖືກສານທ້ອງຖິ່ນ ຕັດສິນລົງໂທດແລ້ວ. ຂ່າວຄາວເຫລົ່ານີ້ ແມ່ນອຳນາດປົກຄອງຝະລັ່ງເປັນຜູ້ສະໜອງໃຫ້ແກ່ເຈົ້າໜ້າທີ່ຕຳຫລວດອັງກິດ. ນັກສືບຝະລັ່ງຈຶ່ງຕ້ອງອອກຈາກຮ່າໂນ້ຍມາຍັງຮົ່ວກົງ ເພື່ອ ສົມທົບກັບກົງສູນຝະລັ່ງເຮັດໃຫ້ການພິຈາລະນາຄະດີໄປຕາມທິດທາງທີ່ຕ້ອງການ ແລະ ເພື່ອຕົກລົງກັນກັບອຳນາດປົກຄອງອັງກິດໃຫ້ເຂົາເຈົ້າມອບນັກປະຕິວັດຫວຽດນາມໃຫ້ຝະລັ່ງ.

ລົດສະບາຍ ແລະ ເພື່ອນຮ່ວມອາຊີບຂອງເພິ່ນ ຕົກລົງວ່າ ໃນເວລາແກ້ຄວາມໃຫ້ຕຶງເວິນເຊີນັ້ນ ຕ້ອງນຳໃຊ້ບັນດາຈຸດພິເສດຂອງສານອັງກິດ, ຄືຕ້ອງປະຕິບັດ ຕາມແຕ່ລະປະໂຫຍກ ແຕ່ລະຄວາມຂອງບັນດາຂໍ້ບັງຄັບ ແລະ ຂໍ້ກຳນົດ. ເຫດຜົນຂອງພວກເພິ່ນແມ່ນເນັ້ນໃສ່ພື້ນຖານສຳຄັນສາມຢ່າງດັ່ງນີ້:

໑) ການຈັບກຸມຕຶງເວິນເຊີ ຖືວ່າຜິດກົດໝາຍ ຍ້ອນວ່າຕຶງເວິນເຊີ ຖືກຈັບໃນວັນທີ ໖ ເດືອນມິຖຸນາ, ແຕ່ວ່າເວລາກາຍໄປຈົນຮອດວັນທີ ໑໔ ເດືອນມິຖຸນາ, ຜູ້ສຳເລັດລາຊະການຮົ່ວກົງຈຶ່ງເຊັນຊື່ໃນຄຳສັ່ງຈັບ.

໒) ບັນດາອົງການສອບສວນມີການກະທຳບາງອັນທີ່ຝືນກັບກົດໝາຍ ໂດຍສອບຖາມຈຳເລີຍກາຍຂອບເຂດຂອງການສອບສວນ. ພື້ນຖານກົດໝາຍອັງກິດສະໄໝ ນັ້ນຍັງຍຶດຖືຂໍ້ກຳນົດເກົ່າເຊັ່ນ ໃນເວລາສອບຖາມຜູ້ທີ່ຖືກຈັບ ຜູ້ສອບສວນຕ້ອງບໍ່ຕັ້ງຄຳຖາມເກີນ ໕ ຂໍ້ ຄື: ຊື່ ແລະ ນາມສະກຸນ, ອາຊີບ ແລະ ອື່ນໆ... ລົດສະບາຍ ຮູ້ແຈ້ງວ່າ ນອກຈາກ ໕ ຄຳຖາມດັ່ງກ່າວນີ້ແລ້ວ ຢູ່ທີ່ສະຖານີຕຳຫລວດ, ຕຶງເວິນເຊີ ກໍເຄີຍພົບກັບຄຳຖາມທີ່ມີລັກສະນະທ້າທາຍແບບນີ້ມາຫລາຍເທື່ອແລ້ວ: "ທ່ານເຄີຍໄດ້ໄປ ປະເທດລັດເຊຍບໍ ແລະ ໄປເພື່ອຈຸດປະສົງຫຍັງ ?". ດັ່ງນັ້ນຈຶ່ງເວົ້າໄດ້ວ່າ ອຳນາດປົກຄອງໄດ້ລະເມີດເນື້ອໃນຈິດໃຈຂອງກົດໝາຍ.

໓) ຂໍ້ສະເໜີຂອງ ໂຈດ ໃຫ້ເນລະເທດຈຳເລີຍໄປຍັງອິນດູຈີນ ຊຶ່ງເປັນບ່ອນ

ທີ່ຈຳເລີຍເດັດຂາດຕ້ອງຖືກປະຫານຊີວິດ, ແມ່ນການກະທຳທີ່ລະເມີດກົດໝາຍເໝືອນກັນ. ຕາມກົດໝາຍອັງກິດ ໂດຍສະເພາະ ພະລາຊະໂອງການກ່ຽວກັບພົນບັງຄັບ ໃຊ້ຂອງກົດໝາຍດັ່ງກ່າວຢູ່ໃນປະເທດເມືອງຂຶ້ນ ໄດ້ລະບຸໄວ້ຢ່າງຈະແຈ້ງວ່າ ຖ້າຜູ້ໃດກະທຳຜິດຖືກສານຊຽງໄຮ້ຕັດສິນ ແຕ່ຜູ້ກ່ຽວພັດມີໜ້າຢູ່ຮົງກົງ,ອຳນາດປົກຄອງ ຮົງກົງຕ້ອງຈັບກຸມຜູ້ກະທຳຜິດນັ້ນໂລດ ແລະ ມອບໃຫ້ອຳນາດປົກຄອງຊຽງໄຮ້, ແຕ່ໃນກໍລະນີນີ້, ຈຶ່ງຂໍເວົ້າຕື່ມວ່າ, ຂໍ້ກຳນົດດັ່ງກ່າວໄດ້ນຳໃຊ້ສະເພາະກັບບຸກຄົນທີ່ເປັນລາຊະດອນຂອງລາຊະອານາຈັກອັງກິດເທົ່ານັ້ນ. ຕົງເວີນເຊີ ເປັນປະຊາຊົນຂອງປະເທດໜຶ່ງ - ຕ່າງຫາກ ສະນັ້ນຈຶ່ງບໍ່ສາມາດນຳໃຊ້ຂໍ້ກຳນົດດັ່ງກ່າວກັບຕົງເວີນເຊີໄດ້.

ເວລາເລີ່ມພິຈາລະນາຄະດີ ອຳນາດປົກຄອງຄາດຄະເນວ່າ ໃນວາລະພິຈາລະນາຄະດີເທື່ອທຳອິດ ເຂົາເຈົ້າຈະສາມາດບັນລຸການຕັດສິນລົງໂທດຈຳເລີຍ ໂດຍການສົ່ງຈຳເລີຍໄປອິນດູຈີນທາງກຳປັ່ນຝະລັ່ງຊຶ່ງໄດ້ທອດສະໝໍລໍຖ້າຢູ່ທ່າເຮືອຮົງກົງ. ແຕ່ການເຄື່ອນໄຫວຂອງທະນາຍຄວາມຝ່າຍຈຳເລີຍໄດ້ປັ່ນຫຼູກງການຄິດໄລ່ຂອງເຂົາເຈົ້າ. ການພິຈາລະນາເຫດຜົນຂອງທະນາຍຄວາມຝ່າຍຈຳເລີຍທີ່ຍົກຂຶ້ນ ເພື່ອພິສູດ ຄວາມບໍລິສຸດຂອງຈຳເລີຍໄດ້ແກ່ຍາວ ເວລານາຕະຫລອດ ໕ ວາລະຕັດສິນຄືແຕ່ເດືອນມິຖຸນາຈົນຮອດເດືອນຕຸລາ. ສຸດທ້າຍ, ສານໄດ້ຕັດສິນຢ່າງສະຫລາດສະຫລຽວວ່າ: ລົບລ້າງຂໍ້ກ່າວຫາຕໍ່ຕົງເວີນເຊີໝົດທຸກຂໍ້ ເຖິງຢ່າງໃດກໍດີຕົງເວີນເຊີກໍຍັງຖືກເນລະເທດ ອອກຈາກເມືອງຂຶ້ນອັງກິດ ແລະ ຖືກສົ່ງໄປອິນດູຈີນ.

ນີ

ເບິ່ງຄືວ່າ ພວມຕົກຢູ່ໃນສະພາບຈົນຕາແຈ. ແຕ່ວ່າໃນສະພາບຄືແນວນີ້ ຄວາມສາມັກຄີສາກົນໄດ້ມີບົດບາດອັນຕັດສິນອີກເທື່ອໜຶ່ງ. ໂດຍຜ່ານພະແນກຝະລັ່ງ ຂອງອົງການຈັດຕັ້ງສາກົນເພື່ອໃຫ້ການຊ່ວຍເຫລືອບັນດານັກຮົບປະຕິວັດ ຄະນະບໍລິຫານງານສາກົນກອມມູນິດໄດ້ເຂົ້າຮ່ວມໂດຍກົງໃນການພິຈາລະນາຄະດີຂອງຕົງເວີນເຊີ. ໂດຍສົມທົບກັບຜູ້ຕາງໜ້າຂອງອົງການຈັດຕັ້ງສາກົນເພື່ອໃຫ້ການຊ່ວຍເຫລືອບັນດານັກຮົບ ປະຕິວັດ ທີ່ເອີ້ນຕົນເອງວ່າເປັນ "ເພື່ອນມິດຂອງ ຕົງເວີນເຊີ", ລົດສະບາຍ ຄັດຄ້ານ

ການຕັດສິນຂອງສານຮົ່ງກົງ ແລະ ໂດຍອີງໃສ່ກົດໝາຍອັງກິດ ເພິ່ນສົ່ງໜັງສື ຊຸທອນອົນທາສະພາລັບຂອງເຈົ້າຊີວິດຢູ່ລອນດອນ. ຕາມຄຳຂໍຮ້ອງຂອງເພິ່ນ, ໂນແອນ ປຣິດ ນັກກົດໝາຍອັງກິດຄົນໜຶ່ງທີ່ມີຊື່ສຽງໃນເວລານັ້ນຮັບພາລະເປັນຜູ້ແກ້ຄວາມໃຫ້ຕົງເວິນເຊີ ຢູ່ສະພາລັບຂອງເຈົ້າຊີວິດ.

ບັດນີ້ຍັງແຕ່ລໍຖ້າຜົນອອກມາເທົ່ານັ້ນ. ຫງວຽນອາຍກວັກ ມີຊີວິດຢູ່ດ້ວຍຄວາມປ່ຽວພອຍ, ໂສກເສົ້າຄືເມັດຊາຍຢູ່ທະເລຊາຍໂກບີ, ຢູ່ໃນຫ້ອງຂັງດ່ຽວຂອງຄຸກ ສູນກາງຮົ່ງກົງຊື່ວ່າ "ວິກຕໍເຣຍ". ຫ້ອງຂັງດ່ຽວບ່ອນທີ່ຫງວຽນອາຍກວັກຖືກຂັງຢູ່ ແມ່ນຫ້ອງທີ່ມີລວງຍາວສອງແມັດ, ລວງກວ້າງໜຶ່ງແມັດ ແລະ ໃຊ້ສຳລັບຜູ້ດຽວເທົ່ານັ້ນ. ຢູ່ຕິດເພດານທີ່ມີຄວາມສູງປະມານສາມແມັດມີປ່ອງນ້ອຍໆເປັນຮູບເຄິ່ງເດືອນຂັ້ນດ້ວຍ ລູກຕົ່ງ. ທຸກໆຄືນ, ອາດແນມເຫັນມວນໝູ່ດາວເຫລື້ອມຍິບຍັບຢູ່ບົນທ້ອງຟ້າເຂດຮ້ອນ ອັນດຳມືດ ຜ່ານຈາກປ່ອງຢ້ຽມນ້ອຍໆດັ່ງກ່າວ.

ແຕ່ລະວັນ ກໍເຊັ່ນດຽວກັນກັບຜູ້ຕ້ອງຫາຄົນອື່ນ, ຫງວຽນອາຍກວັກໄດ້ຮັບ ອະນຸຍາດໃຫ້ຍ່າງເລາະໄປມາໃນບໍລິເວນຄຸກສິບຫ້ານາທີ. ຜູ້ທີ່ພາຫງວຽນອອກຈາກຫ້ອງຂັງຄືທຳມະໂລງຄົນເນປານຜູ້ບໍ່ມັກປາກ, ເຂົາຈຶ່ງໜວດຍາວກຽວຈອດກັບເຄົາຄາງ. ເດີ່ນຄຸກເປັນຮູບສີ່ຫລ່ຽມແຄບໆອ້ອມຮອບດ້ວຍຝາກຳແພງສູງເບິ່ງຄ້າຍຄືກົ້ນສ້າງເລິກ. ເຖິງຢ່າງໃດກໍດີ, ການຍ່າງເລາະເປັນສິ່ງໜ້າອອນຊອນເຫລືອຫລາຍແລ້ວ ເພາະມັນຊ່ວຍໃຫ້ຫງວຽນໄດ້ຍິນສຽງຄົນເວົ້າ ແລະ ຕົນເອງກໍໄດ້ລົມນຳໝູ່, ໄດ້ເຫັນໜ້າຕາ ຜູ້ຄົນ ແລະ ເຫັນສ່ວນນ້ອຍໆຂອງທ້ອງຟ້າ.

ລົດສະບາຍ ແລະ ເມຍຂອງເພິ່ນໄດ້ມາຢາມຫງວຽນອາຍກວັກຢູ່ຄຸກເປັນປະຈຳ. ພວກເພິ່ນສະໜິດສະໜົມກັບຫງວຽນດ້ວຍຄວາມຈິງໃຈ. ຢູ່ໃນຈົດໝາຍການໜຶ່ງທີ່ສົ່ງເຖິງ "ເພື່ອນຂອງຕົງເວິນເຊີ" ໃນຊຸມນັ້ນ ລົດສະບາຍໄດ້ຂຽນວ່າ:

"ຂ້າພະເຈົ້າຢາກເວົ້າໃຫ້ພວກທ່ານຮູ້ວ່າ ລູກຄວາມຂອງຂ້າພະເຈົ້າແມ່ນຄົນທີ່ມີລະດັບວັດທະນະທຳສູງ, ເນື່ອງດ້ວຍຫລາຍສາເຫດ, ຂ້າພະເຈົ້າແມ່ນຄົນດຽວຊຶ່ງເພິ່ນໃຫ້ຄວາມເຊື່ອຖື (ນັບທັງພະນັກງານເຣັດວຽກກັບຂ້າພະເຈົ້າ ແຕ່ບໍ່ແມ່ນໝົດທຸກຄົນ). ຍອມມະນຸດສະທຳ ຂ້າພະເຈົ້າໄດ້ໄປຢາມເພິ່ນເລື້ອຍໆ ເທົ່າທີ່ສາມາດຈະເຣັດໄດ້ , ພວກຂ້າພະເຈົ້າເວົ້າໄດ້ວ່າຮັກແພງສະໜິດສະໜົມກັນ. ສະນັ້ນ ຂ້າພະເຈົ້າຈະຖືວ່າເປັນຄວາມເສຍຫາຍຂອງສ່ວນຕົວ, ຖ້າວ່າເພິ່ນຫາກຖືກມອບໃຫ້ ຄົນຝະລັ່ງ ຫລື ຖືກ

ພວກນັກສືບຝະລັ່ງຂ້າຢ່າງທາລຸນ.

ດ້ວຍຄວາມເປັນຫ່ວງວ່າ ເພິ່ນອາດຈະຖືກພວກນັກສືບຝະລັ່ງລອບສັງຫານ ຢ່າງທາລຸນ ສະນັ້ນຜູ້ທີ່ຢ້ຽມຢາມເພິ່ນໄດ້ຈຶ່ງມີແຕ່ຂ້າພະເຈົ້າກັບເມຍຂອງຂ້າພະເຈົ້າ ເທົ່ານັ້ນ. ຈາກແຫລ່ງຂ່າວທີ່ເຊື່ອຫມັ້ນໄດ້ ຂ້າພະເຈົ້າຈຶ່ງຮູ້ວ່າ ພວກຝະລັ່ງໄດ້ຕັ້ງລາງວັນ ໒໕ ພັນຫລຽນໃຫ້ຜູ້ໃດ ຜູ້ຫນຶ່ງທີ່ສາມາດຈັບທ່ານຜູ້ນັ້ນໄດ້...ເຖິງແມ່ນວ່າຫນັງສືຊູທອນຈະຖືກຮັບຮູ້ ແລະ ລູກຄວາມຂອງຂ້າພະເຈົ້າຈະຖືກປົດປ່ອຍແລ້ວກໍຕາມ ແຕ່ເພິ່ນຍັງຈະມີໄພອັນຕະລາຍຈາກການລອບສັງຫານຂອງພວກນັກສືບຝະລັ່ງ. ເພິ່ນບໍ່ສາມາດພໍານັກຢູ່ບົນດິນແດນເມືອງຂຶ້ນຕອນນີ້ຢ່າງບໍ່ມີກໍານົດ, ເພາະວ່າເຈົ້າຫນ້າທີ່ຕໍາຫລວດ ສ່ວນໃຫຍ່ຂອງຮົ່ງກົງໄດ້ຮູ້ຈັກຫນ້າຕາເພິ່ນຢ່າງດີ. ໂອກາດທີ່ເພິ່ນຈະຫລົບຫນີອອກຈາກ ຮົ່ງກົງໂດຍບໍ່ໃຫ້ພວກຝະລັ່ງຮູ້ ມີຫນ້ອຍທີ່ສຸດ ກໍຍ້ອນວ່າເຂົາເຈົ້າຕັ້ງລາງວັນສູງທີ່ສຸດ ສໍາລັບຂ່າວຄາວກ່ຽວກັບເພິ່ນ..."

ເຖິງແມ່ນວ່າລົດສະບາຍຈະປະຕິບັດມາຕະການປ້ອງກັນຄວາມປອດໄພໄວ້ກໍຕາມ ນອກຈາກເພິ່ນເອງ ແລະ ເມຍແລ້ວ ບໍ່ມີໃຜສາມາດເຂົ້າຢ້ຽມຢາມຕົງເວີນເຊີ ໄດ້ອີກ ແຕ່ສະພາບເກີດຂຶ້ນໃນແບບທີ່ວ່າບຸລຸດສອງຄົນທີ່ມີຊື່ສຽງຫລາຍພໍສົມຄວນຢູ່ຮົ່ງກົງຮູ້ຈັກກັບຕົງເວີນເຊີຕື່ມອີກ. ພາຍຫລັງຖືກກັກຂັງໄວ້ຢູ່ໃນຄຸກໄດ້ຫລາຍເດືອນ, ພະຍາດ ປອດແຫ້ງທີ່ມີຢູ່ໃນຕົວຂອງຕົງເວີນເຊີຢູ່ແລ້ວ ຊໍ້າພັດຟື້ນຄືນອີກ. ລົດສະບາຍເອົາໃຈໃສ່ຊ່ວຍເຫລືອຕົງເວີນເຊີເປັນຢ່າງດີ ເພື່ອເຮັດແນວໃດໃຫ້ເພິ່ນໄດ້ຍ້າຍໄປຮັກສາຕົວຢູ່ໂຮງຫມໍປະຈໍາຄຸກ. ເທື່ອຫນຶ່ງ ບົນເສັ້ນທາງໄປໂຮງຫມໍ ເມື່ອຕອນແວ່ເຂົ້າຮ້ານຂາຍ ດອກໄມ້ ວ່າຈະຊື້ດອກບົວຈັກສາມສີ່ດອກ ເພື່ອເອົາໄປຕ້ອນຄົນເຈັບ, ພັນລະຍາຂອງລົດສະບາຍໄດ້ພົບພັນລະຍາຂອງ ໂທມາດ ເຊົາຕັນ ຮອງຜູ້ສໍາເລັດລາຊະການຮົ່ງກົງຢູ່ຮ່ອມ ເຂົ້າຮ້ານ. ຢູ່ໃນວົງນັກຂຽນ ແລະ ນັກການລະຄອນຮົ່ງກົງ ນາງຜູ້ນີ້ ມີຄົນຮູ້ຈັກຫລາຍກວ່າ ຢູ່ໃນນາມປາກກາ ສະແຕນລາ ເບັນຈຸ້ມ. ຍ້ອນຄວາມເປັນເພື່ອນ ທີ່ມີມາແຕ່ດົນແລ້ວນັ້ນ, ສອງຝ່າຍຈຶ່ງໂອ້ລົມກັນຢ່າງເບີກບານມ່ວນຊື່ນ, ພັນລະຍາລົດສະບາຍ ໄດ້ເລົ່າເລື່ອງຕົງເວີນເຊີ ຊຶ່ງເປັນບຸກຄົນທີ່ຢູ່ໃນຄວາມຊ່ວຍເຫລືອຂອງຕົນສູ່ນາງຟັງ. ການສົນທະນາກັນຄັ້ງນີ້ໄດ້ເຮັດໃຫ້ ນາງສະແຕນລາ ຊອບອົກຊອບໃຈ ມັນເຮັດໃຫ້ນາງມີຈິດໃຈຢາກໄປຢ້ຽມຢາມຕົງເວີນເຊີ. ເທື່ອຕໍ່ມາ, ນາງລົດສະບາຍໄດ້ໄປໂຮງຫມໍ ຮ່ວມກັບເພື່ອນຍິງທີ່ມີຖານະສູງ. ນາງສະແຕນລາ ເວົ້າຈາພາທີກັບຕົງເວີນເຊີ ດົນສົມຄວນ ,

ນາງນິຍົມຊົມຊອບຄວາມສາມາດເວົ້າພາສາອັງກິດ ແລະ ມີມາລະຍາດຮຽບຮ້ອຍ ຂອງນັກໂທດຄົນນີ້. ເມື່ອກັບມາຮອດເຮືອນ ນາງໄດ້ຣາຍໃຫ້ຜົວວ່າເປັນດ້ວຍເຫດໃດ ຈິ່ງປ່ອຍໃຫ້ຄົນຜູ້ມີວັດທະນະທຳ ທັງເປັນຄົນຕ່າງຊາດອີກດ້ວຍ ຖືກຂັງຄຸກຄືແນວນັ້ນ. ນາງຈຳໃຫ້ທ່ານເຊົາຕັນໄປໂຮງຫມໍນຳກັນ ເພື່ອໄປຮູ້ຈັກກັບຜູ້ຕ້ອງຫາຫວຽດນາມ. ຫງວຽນໄດ້ສ້າງຄວາມຮູ້ສຶກອັນຈັບງາມຕໍ່ຮອງຜູ້ສຳເລັດລາຊະການເຊັ່ນດຽວກັບຄົນອັງກິດອື່ນໆ. ພາຍລູນມາ ເຫດການນີ້ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການແກ້ໄຂ "ຄະດີ ຕົງເວິນເຊີ" ໄປໃນທາງທີ່ດີ.

ໃນຕົ້ນເດືອນກໍລະກົດປີ ໑໙໓໒, ຫມາຍຄວາມວ່າເກືອບຫນຶ່ງປີຫລັງຈາກເລີ່ມມີຄະດີຕົງເວິນເຊີ, ລົດສະບາຍໄດ້ຮັບຂ່າວດີທີ່ສົ່ງມາແຕ່ລອນດອນວ່າ ຫນັງສືຊູທອນຂອງເພິ່ນໄດ້ຖືກຮັບຮູ້ແລ້ວ. ເພື່ອນຮ່ວມອາຊີບຄົນຫນຶ່ງຂອງເພິ່ນໄດ້ໃຫ້ຮູ້ລາຍລະອຽດ ກ່ຽວກັບການພິຈາລະນາຄະດີ ຢູ່ສະພາລັບຂອງເຈົ້າຊີວິດ. ສະຕາເຟີ ກະຣິບ ຊຶ່ງແມ່ນຜູ້ປົກປ້ອງສິດຜົນປະໂຫຍດຂອງອຳນາດປົກຄອງຮົ່ງກົງ (ພາຍລູນມາເພິ່ນໄດ້ເປັນ ນັກເຄື່ອນໄຫວທີ່ມີຊື່ສຽງໃນພັກແຮງງານອັງກິດ - ຜູ້ຂຽນ), ຫລັງຈາກທີ່ໄດ້ຄົ້ນຄວ້າສຳນວນ-ຄະດີຈຶ່ງສະຫລຸບວ່າ: ໃນກໍລະນີທີ່ຄະດີຈະຖືກພິຈາລະນາຄືນອີກ, ອຳນາດປົກຄອງ ຮົ່ງກົງອາດຈະປະລາໄຊກໍເປັນໄດ້ ເນື່ອງຈາກຂາດພະຍານຫລັກຖານ ຈາກນັ້ນຄວາມເຊື່ອຖືກໍຈະຫລຸດຫນ້ອຍຖອຍລົງ. ເພື່ອຫລີກເວັ້ນຜົນສະທ້ອນທີ່ບໍ່ດີ ກະຣິບ ໄດ້ໄປພົບທະນາຍຄວາມຂອງຕົງເວິນເຊີຢູ່ສະພາລັບຂອງເຈົ້າຊີວິດ ແລະ ສອງຄົນກໍໄດ້ຕົກລົງເຊັນເອກະສານນຳກັນກ່ຽວກັບການປົດປ່ອຍຜູ້ຕ້ອງຫາອານນາມ ຢ່າງບໍ່ພິຈາລະນາຕື່ມອີກ.

ຫນັງສືພິມຮົ່ງກົງ ຊຶ່ງໃນເມື່ອກ່ອນນີ້ເກືອບວ່າບໍ່ເວົ້າຫຍັງເລີຍກ່ຽວກັບ " ຄະດີຕົງເວິນເຊີ", ມາບັດນີ້ພັດໄດ້ລົງຂ່າວ ທີ່ພາດຫົວຂໍ້ບັກໃຫຍ່ເດັ່ນຂຶ້ນວ່າ· "ຄະດີ ທີ່ຄວນເອົາໃຈໃສ່ໄດ້ຈົບລົງແລ້ວ","ນັກໂທດຄົນອານນາມໄດ້ຮັບອິດສະຫລະພາບ ແລະ ບໍ່ຖືກເນລະເທດກັບຄືນອິນດູຈີນ","ອຳນາດອັນຍິ່ງໃຫຍ່ຂອງກົດຫມາຍ". ຫນັງສືພິມ ສະບັບຫນຶ່ງໄດ້ລົງຂ່າວວ່າ: "ຫນັງສືຊູທອນທີ່ຖືກສົ່ງໄປຍັງສະພາລັບຂອງເຈົ້າຊີວິດ ໃນນາມຕົງເວິນເຊີ ເຊິ່ງຖືກັນວ່າເປັນນັກປະຕິວັດອານນາມ ໄດ້ຮັບການພິຈາລະນາ ໂດຍສອດຄ່ອງກັບກົດຫມາຍອັງກິດ ວ່າດ້ວຍສິດສ່ວນຕົວຂອງບຸກຄົນ" ຫນັງສືຊູທອນສະບັບນີ້ໄດ້ຄັດຄ້ານຄຳສັ່ງສົ່ງຕົງເວິນເຊີ ອອກປະເທດ ເຊິ່ງແມ່ນ ວິນລຽມ ປີນ ຜູ້ສຳເລັດລາຊະການເປັນຜູ້ເຊັນໃນປີຜ່ານມາ. ຄະດີຈຶ່ງຕ້ອງຢຸດຊະງັກ ພາຍຫລັງວາລະພິຈາລະນາຄັ້ງ

ວັນທີ ໒໗ ເດືອນມິຖຸນາ ບົນພື້ນຖານການເຫັນພ້ອມນຳກັນລະຫວ່າງສອງຝ່າຍ...ໄດ້ມີພະລາຊະໂອງການ ທີ່ບົ່ງວ່າການຕັດສິນຂັ້ນກ່ອນຂອງສານເປັນໂມຄະ. ພົນປະກົດ ວ່າ ຕົງເວີນເຊີ ຈະຖືກເນລະເທດໄປຢູ່ບ່ອນທີ່ເພິ່ນເລືອກເອົາເອງ ແລະ ເປັນບ່ອນ ທີ່ບໍ່ມີໄພຮູ້. ນອກຈາກອຳນາດປົກຄອງຝະລັ່ງແລ້ວ, ຜູ້ທີ່ມີສ່ວນກ່ຽວຂ້ອງ ຕ້ອງຕອບສະໜອງຕາມການຕັດສິນດັ່ງກ່າວ..."

ວັນທີ່ຄອງຄອຍມາດົນນານ ຄືວັນທີ່ຈະໄດ້ຮັບອິດສະຫລະພາບ ໄດ້ມາຮອດແລ້ວ. ບ່າດນີ້ສິ່ງສຳຄັນຄືຕ້ອງໜີອອກຈາກຮົ່ງກົງໃຫ້ໄວທີ່ສຸດ, ຍິ່ງປິດລັບເທົ່າໃດຍິ່ງເປັນການດີ. ໃນການປຶກສາຫາລືກັນແບບຄອບຄົວຢູ່ເຮືອນຂອງລຶດສະບາຍ ພວກເພິ່ນໄດ້ ຕັດສິນໃຈຈະຊື້ປີ້ກຳປັ່ນໃຫ້ຕົງເວີນເຊີ ສຳລັບກຳປັ່ນຖຽວນໍ້ໆນີ້ ທີ່ຈະເດີນທາງໄປເອີລົບ ຕົງເວີນເຊີ ກໍຈະຂຶ້ນບົກໃນທັນທີໂລດ ເມື່ອກຳປັ່ນຈອດທ່າເຮືອທຳອິດ. ການສົ່ງລາ ເຕັມໄປດ້ວຍຄວາມອາໄລ ແລະ ຄວາມໂສກເສົ້າ ຍ້ອນວ່າສອງຜົວເມຍລຶດສະບາຍຮັກແພງຕົງເວີນເຊີຢ່າງສະໜິດແໜ້ນ. ແລ້ວກຳປັ່ນກໍໄດ້ເຄື່ອນອອກຈາກທ່າ ແລ່ນຕັດອ່າວຮົ່ງກົງອັນສວຍງາມ ແລະ ຫາຍຕົວໄປຢູ່ກ້ຳຂອບຟ້າພູ້ນ.

ລຶດສະບາຍແປກໃຈທີ່ສຸດ ເມື່ອສອງສາມວັນຫລັງມານີ້ ເພິ່ນໄດ້ຮັບຈົດໝາຍຂອງຕົງເວີນເຊີ ທີ່ແຈ້ງໃຫ້ຮູ້ວ່າ ພໍແຕ່ປ່ອງຕີນຢຽບເທິງແຜ່ນດິນສິງກະໂປກໍຖືກ ເຈົ້າໜ້າທີ່ຕຳຫລວດທ້ອງຖິ່ນກັກຕົວເພິ່ນ. ມື້ລູນມາ ເພິ່ນກໍຖືກສົ່ງກັບຄືນຮົ່ງກົງ. ດຽວນີ້ເພິ່ນພັດຖືກກັກຕົວຢູ່ສະຖານີຕຳຫລວດຄືກັນກັບໜຶ່ງປີກ່ອນນີ້.

ລຶດສະບາຍເລົ່າຄືນວ່າ: "ຂ້າພະເຈົ້າແຄ້ນເຄືອງສຸດຂີດ ຄືນວັນນັ້ນ ຂ້າພະເຈົ້ານັ່ງຈົມເດີກດຶນທ່ຽງຄືນຢູ່ໂຕະຮັບດວຽກ, ຄົ້ນຄິດເບິ່ງວ່າດຽວນີ້ຕ້ອງເຮັດຫຍັງ.ສຸດທ້າຍຂ້າພະເຈົ້າຊອກວິທີແກ້ໄຂໄດ້. ເຊົ້າວັນຕໍ່ມາ,ຂ້າພະເຈົ້າໄປຫາທີ່ທຳງານຂອງ ຜູ້ສຳເລັດລາຊະການ. ພາຍຫລັງທີ່ສະແດງຄວາມບໍ່ພໍໃຈຂອງຕົນ ຕໍ່ຜູ້ສຳເລັດລາຊະການວິນລຽມ ປີນ, ເນື່ອງໃນໂອກາດທີ່ອຳນາດປົກຄອງບໍ່ຮັກສາສັນຍາ, ຂ້າພະເຈົ້າຮ້ອງຂໍນຳທ່ານອະນຸຍາດໃຫ້ຕົງເວີນເຊີໄປຮ່າໂມນ (ເມືອງພັກຜ່ອນແຫ່ງໜຶ່ງຂອງຈີນຕັ້ງຢູ່ທິດຕາເວັນອອກສຽງເໜືອຂອງຮົ່ງກົງ) ໂດຍທາງກຳປັ່ນ ເຊິ່ງແມ່ນ ຂ້າພະເຈົ້າເປັນຜູ້ເລືອກເອົາເອງ. ມື້ລູນມາ, ຂ້າພະເຈົ້າໄດ້ຮັບຈົດໝາຍສ່ວນຕົວຂອງຜູ້ສຳເລັດລາຊະການທີ່ຂຽນວ່າ ເພິ່ນໄດ້ອອກຄຳສັ່ງທາງວາຈາໃຫ້ປ່ອຍຕົງເວີນເຊີ, ແຕ່ໃນຂະນະດຽວກັນເພິ່ນຍັງໄດ້ສະແດງຄວາມລະແວງສົງໄສວ່າເຈົ້າໜ້າທີ່ຕຳຫລວດຢູ່ທ່າເຮືອທີ່ປະຕິບັດ

ຫນ້າທີ່ກວດກາຜູ້ໂດຍສານກ່ອນທີ່ກຳປັ່ນຈະອອກເດີນທາງນັ້ນ ອາດຈະຈັບກຸມຕົງເວີນເຊີ ອີກໃຫມ່".

ພາຍຫລັງທີ່ໄດ້ຮັບອິດສະຫລະພາບ ເປັນຄັ້ງທີສອງ, ລົດສະບາຍໄດ້ສັບຊ້ອນ ຫງວຽນໃຫ້ຢູ່ໃນຫໍພັກຂອງສະມາຄົມຊາວກະຣິດສະຕຽນຈີນ ຜູ້ຫນຸ່ມນ້ອຍ. ເພື່ອຮັກສາ ຄວາມລັບ, ພົວເມຍລົດສະບາຍໄດ້ຊື້ໂສ້ງເສື້ອຈີນຫນຶ່ງຊຸດໃຫ້ຫງວຽນ ຊຶ່ງໃນເວລານັ້ນ ເປັນເຄື່ອງນຸ່ງທີ່ນັກປາດ ຫລືພວກເສດຖີຂຸນນາງນິຍົມນຸ່ງຫົ່ມຄືເສື້ອຍາວ, ແຂນກວ້າງ ຕ່າມຫຍ່າມ, ໃສ່ຫມວກສີດຳ, ໃສ່ເກີບແພ. ຫງວຽນໃສ່ຫນວດເຄົາປອມ, ເມື່ອເບິ່ງ ແລ້ວ ຈຶ່ງເຫັນວ່າຕ່າງເກົ່າຢ່າງຂາດຄັ້ນ.

ຈະຫລົບຫນີອອກຈາກຮົ່ງກົງດ້ວຍວິທີໃດນໍ? ເພື່ອຫລີກເວັ້ນຈາກການກວດກາຂອງ ເຈົ້າຫນ້າທີ່ຕຳຫລວດ, ວິທີທີ່ແນ່ນອນກວ່າຫມູ່ແຕ່ກໍຕ້ອງສ່ຽງໄພຫນ້ອຍຫນຶ່ງ ກໍແມ່ນວ່າ ຕ້ອງສົ່ງຕົງເວີນເຊີໄປທາງທະເລດ້ວຍເຮືອຈັກ ຫລືເຮືອໃບລົມ ແລ້ວ ຕໍ່ຈາກນັ້ນ ກໍຂຶ້ນ ກຳປັ່ນໄປຣາໂມນ. ແຕ່ວ່າແຜນການນີ້ຈະບໍ່ປະສົບຜົນສຳເລັດ ຖ້າຫາກວ່າບໍ່ມີການຊ່ວຍ ເຫລືອຂອງຄົນອື່ນ. ຄິດແລ້ວຄິດອີກ, ພົວເມຍລົດສະບາຍຈຶ່ງຕັດສິນໃຈສ່ຽງຂໍຊ່ວຍເຫລືອ ຈາກ ເຊົາຕັນ ຊຶ່ງເປັນບຸກຄົນຫນຶ່ງທີ່ມີນ້ຳໃຈອັນດີງາມກັບເພື່ອນມິດຫວຽດນາມ ຂອງ ເຂົາ. ຮອງຜູ້ສຳເລັດລາຊະການ ເຊົາຕັນຕົກລົງຊ່ວຍເຫລືອດ້ວຍຄວາມເຕັມໃຈ. ວັນ ຫນຶ່ງເຊົາຕັນຂໍອະນຸຍາດຜູ້ສຳເລັດລາຊະການ ວິນລຽມ ປິນ ເພື່ອໃຊ້ເຮືອຈັກ ສ່ວນຕົວ ຂອງຜູ້ສຳເລັດລາຊະການ. ສ່ວນລົດສະບາຍໄດ້ຊື້ປີ້ກຳປັ່ນຊັ້ນທີຫນຶ່ງສອງປີ້ສຳລັບກຳປັ່ນ ຍີ່ປຸ່ນ ທີ່ເດີນທາງໄປຊຽງໄຮ້, ປີ້ຫນຶ່ງມອບໃຫ້ຕົງເວີນເຊີ, ອີກປີ້ຫນຶ່ງມອບໃຫ້ ຂ້າລາ ຊະການຈີນຄົນຫນຶ່ງ, ບຸກຄົນຜູ້ນີ້ລະທີ່ລົດສະບາຍເຊື່ອຖື, ດັ່ງນັ້ນເພິ່ນຈຶ່ງສະເຫນີ ນຳຜູ້ ກ່ຽວໃຫ້ສົ່ງຕົງເວີນເຊີໄປຮອດຣາໂມນ.

ໃນມື້ທີ່ກຳປັ່ນອອກຈາກທ່າເຮືອ, ໃນເວລາທີ່ທ້ອງຟ້າຍັງມືດໆ ເຮືອຈັກຂອງ ຜູ້ ສຳເລັດລາຊະການທີ່ມີແກສັນຍານມັດຕິດຢູ່ກັບເສົາໃບເຮືອ ພ້ອມດ້ວຍທະຫານ ປ້ອງກັນ ໄດ້ຈອດຢູ່ທີ່ທ່າເຮືອໄຕຣວາງຊຶ່ງຕັ້ງຢູ່ໃນເຂດຂອງເຈົ້າຂຸນມູນນາຍຂອງຮົ່ງກົງ. ຄົນຈີນ ຜູ້ຫນຶ່ງນຸ່ງຖືສະອາດຮຽບຮ້ອຍ ມີເລຂາຍ່າງຕາມຫລັງ ກ້າວລົງເຮືອຈັກ. ເພິ່ນກ່າວອຳ ລາຢ່າງສະຫນິດສະຫນົມກັບຄົນເອີລົບສອງຄົນຄືຊາຍຫນຶ່ງ ແລະ ຍິງຫນຶ່ງ ພວກເຂົາ ເຈົ້າຜັດປ່ຽນກັນກອດຈູບກັນ, ຖັດຈາກນັ້ນ ເຮືອຈັກກໍເຄື່ອນອອກຈາກທ່າແລ່ນໄປສູ່ກາງ ທະເລ. ຢູ່ໄກໆພູ້ນ, ມີກຳປັ່ນສີຂາວປະກົດຕົວຂຶ້ນ ມັນກຳລັງແລ່ນມຸ່ງຫນ້າໄປສູ່ ທິດຕາ

ເວັນອອກ. ກັບຕັນເຮືອໄດ້ຮັບວິທະຍຸໂທລະເລກຈາກເຮືອຈັກ ວ່າໃຫ້ຈອດກຳປັ່ນແລ້ວຮັບເອົາແຂກສອງຄົນຂອງຜູ້ສຳເລັດລາຊະການຮົ່ງກົງ ຊຶ່ງໄດ້ຈ່ອງບ່ອນນັ່ງຢູ່ເທິງ ກຳປັ່ນກ່ອນແລ້ວນັ້ນຂຶ້ນກຳປັ່ນ. ເມື່ອຂຶ້ນໄດກຳປັ່ນຢ່ອນລົງນ້ຳ ກັບຕັນ ຢ່າງອອກມາ ຕ້ອນຮັບແຂກຜູ້ມີກຽດດ້ວຍຕົນເອງ, ເອົາຍົກມືຂຶ້ນຈູຫມວກຄຳນັບຕາມລະບຽບທະຫານ, ຈາກນັ້ນກໍພາແຂກເຂົ້າຫ້ອງພັກ. ສອງສາມຊົ່ວໂມງຈາກນັ້ນ ກຳປັ່ນກໍໄດ້ໄປຈອດທີ່ ຮ່າໂມນດ້ວຍຄວາມປອດໄພ, ສະຖານທີ່ແຫ່ງນີ້ທັງກົດຫມາຍອັງກິດກໍ່ຄືກົດຫມາຍຝະລັ່ງ ຕ່າງກໍບໍ່ມີຜົນບັງຄັບໃຊ້.

...ປະທານໂຮ່ຈີມິນ ຮັກສາຄວາມຮູ້ສຶກກະຕັນຍູ ຕໍ່ສອງຜົວເມຍລົດສະບາຍຕະຫລອດຊີວິດ. ພາຍຫລັງມາ ເມື່ອຂຶ້ນເປັນປະທານປະເທດຫວຽດນາມເອກະລາດແລ້ວ, ແຕ່ລະປີ ໃນໂອກາດບຸນປີໃຫມ່ປະທານໄດ້ສົ່ງບັດອວຍພອນ ແລະ ຊໍ່ດອກໄມ້ໄປໃຫ້ເພິ່ນທັງສອງ. ເດືອນມັງກອນປີ ໑໙໖໐, ລົດສະບາຍທີ່ເຖົ້າແກ່ແລ້ວ ພ້ອມດ້ວຍພັນລະຍາ ແລະ ລູກສາວໄດ້ມາຢ້ຽມຢາມຮ່າໂນ້ຍຕາມຄຳເຊີນຂອງປະທານໂຮ່ຈີມິນ, ໃນຖານະເປັນແຂກຜູ້ມີກຽດຂອງປະທານ. ພວກເຂົາເຈົ້າໄດ້ພຳນັກຢູ່ຫວຽດນາມຫນຶ່ງເດືອນ, ໄດ້ໄປຢ້ຽມຢາມຫລາຍແຫ່ງຢູ່ພາກເຫນືອຫວຽດນາມ, ແລະ ໄດ້ຕ້ອນຮັບບຸນປີໃຫມ່ ທີ່ເຕັມໄປດ້ວຍສີສັນສວຍງາມຮ່ວມກັບປະທານໂຮ່ຈີມິນ ແລະ ບັນດາເພື່ອນຮ່ວມຣົບ ຂອງເພິ່ນ...

໔

ຢູ່ຮ່າໂມນ ຖ້າເບິ່ງທາງຮູບນອກ ຫງວຽນດຳລົງຊີວິດ ຄືຄົນຈີນມັ່ງລົ່ງສົມບູນ ທີ່ໄປພັກຜ່ອນຫຍ່ອນອາລົມ. ຫນັງສືພິມຮົ່ງກົງກໍບໍ່ຂຽນຫຍັງເລີຍກ່ຽວກັບຫງວຽນ. ຄົງຈະບໍ່ມີໃຜທີ່ສັງເກດເຫັນວ່າ ຫງວຽນຫາຍຕົວຢ່າງບໍ່ມີຮ່ອງຮອຍ. ລໍ້ຖ້າອີກບໍ່ດົນ ຫງວຽນຈຶ່ງຕັດສິນໃຈກັບມາຊຽງໄຮ້. ຢູ່ບ່ອນນີ້ ຫງວຽນປາດຖະຫນາວ່າຈະລົງກຳປັ່ນໂຊວຽດທີ່ເດີນທາງໄປວະລາດີວົດສະຕົກ. ແມ່ນກະໂຕເສັ້ນທາງນີ້ລະ ຊຶ່ງບັນດາຊາວຫນຸ່ມ ຮັກຊາດຫວຽດນາມ ຖືກສົ່ງໄປຮຽນທີ່ມະຫາວິທະຍາໄລກອມມູນິດສຳລັບ ຊາວຜູ້ອອກແຮງງານພາກຕາເວັນອອກ.

ເພື່ອຈະໄປຮອດທ່າເຮືອ ແລະ ລົງກຳປັ່ນໂຊວຽດໄດ້ນັ້ນ ຕ້ອງຕິດຕໍ່ກັບຜູ້ຕາງໜ້າຄົນໃດຄົນໜຶ່ງຈາກສາກົນກອມມູນິດ. ແຕ່ຈະເຮັດແນວໃດຈຶ່ງຈະຕິດຕໍ່ໄດ້ ? ບັນດາເພື່ອນຮ່ວມຮົບຂອງເພິ່ນ ເຊິ່ງໄດ້ແກ່ບັນດາຜູ້ຕາງໜ້າຂອງສາກົນກອມມູນິດ ທີ່ຂຶ້ນກັບຄະນະບໍລິຫານງານສູນກາງພັກກອມມູນິດຈີນເຊັ່ນ ອັກຕົວ ເອວາ, ອົດໂຕ ບະຣາວ, ມານຟະເຣດ ສະເຕີ (ຄົນສ່ວນຫລາຍເອີ້ນເພິ່ນວ່າ "ນາຍພົນກະໄຣເບີ" ໃນຊຸມປີສົງຄາມກາງເມືອງຢູ່ແອດສະປາຍ) ພາກັນດຳເນີນວຽກງານຢ່າງປິດລັບທີ່ສຸດ ຢູ່ໃນຂຸ້ມໃດຂຸ້ມໜຶ່ງທີ່ຂຶ້ນກັບເຂດຂອງຄົນເອີລົບ ທີ່ອາໄສຢູ່ໃນຕົວເມືອງ. ແຕ່ວ່າຫງວຽນຊ້ຳພັດມອງບໍ່ເຫັນທາງໃດທີ່ຈະຕິດຕໍ່ກັບພວກເຂົາເຈົ້າ ການພະຍາຍາມຊອກຫາຜູ້ໃດ ຜູ້ໜຶ່ງຢູ່"ເຂດສາກົນ" ທີ່ເຕັມໄປດ້ວຍນັກສືບ ກໍຈະເປັນການກະທຳທີ່ຂາດຄວາມລະມັດລະວັງທີ່ສຸດ.

ແຕ່ຢູ່ໃນເຂດຄົນຈີນ ການຫລົບຊ່ອນຕົວແຮງບໍ່ແມ່ນເລື່ອງງ່າຍດາຍ ປານໃດ. ພວກນັກສືບຂອງຈຽງໄຄເຊັກທຳການກວາດລ້າງຢ່າງໜັກ. ຫງວຽນກໍຍັງສືບຕໍ່ສວມບົດບາດເປັນຄົນຈີນຮັ່ງມີ ທີ່ພຳນັກຢູ່ໃນໂຮງແຮມສວຍງາມ. ແຕ່ບໍ່ອາດດຳລົງຊີວິດແບບ ນີ້ອີກຕໍ່ໄປ, ເງິນຄຳກໍນັບມື້ໝົດໄປ. ທຸກໆຄືນ ຫງວຽນອັດປະຕູໄວ້ຢ່າງແໜ້ນໜາ ຈີ່ມັນຝະລັ່ງກິນ ດື່ມນ້ຳດິບ ຈາກນັ້ນກໍຊັກເຄື່ອງນຸ່ງຈົນຮອດເດິກ, ແຕ່ວ່າຊຸດເຄື່ອງນຸ່ງຈີນດັ່ງກ່າວໄດ້ເກົ່າລົງຈັກໄຊ.

ຕອນເຊົ້າວັນໜຶ່ງ ຫງວຽນເປີດໜັງສືພິມທ້ອງຖິ່ນອອກອ່ານ. ຂ່າວອັນໜຶ່ງ ທີ່ສະດຸດຕາຫງວຽນແມ່ນວ່າ: ຄະນະຜູ້ແທນຂອງລັດຖະສະພາປະເທດເອີລົບ ຝ່າຍຕ້ານສົງຄາມໄດ້ມາເຖິງຊຽງໄຮ້. ໃນລາຍຊື່ຜູ້ແທນທີ່ຮ່ວມເດີນທາງມານັ້ນ, ຫງວຽນອ່ານພົບຊື່ ໄວຢັງ-ກູຕົວຣິເອ ຢ່າງບໍ່ຄາດຄິດມາກ່ອນ. ຄວາມດີໃຈອັນປຽບບໍ່ໄດ້ພຸ່ງຂຶ້ນ ໃນຫົວໃຈຂອງຫງວຽນ. ໂອຍ, ຈັ່ງແມ່ນໂຊກດີແທ້! ເຂົາເປັນບຸກຄົນທີ່ຈະສາມາດຊ່ວຍເຫລືອຫງວຽນໃຫ້ຕິດຕໍ່ກັບບັນດາສະຫາຍໄດ້. ມີແຕ່ສິ່ງຈົດໝາຍນຳ ໄວຢັງ-ກູຕົວຣິເອ ແລະ ຕົກລົງກັນກ່ຽວກັບເວລາ ແລະ ສະຖານທີ່ພົບພໍ້ເທົ່ານັ້ນ. ແຕ່ດຽວນີ້ຈະເຮັດ ຈັ່ງໃດນໍ ? ໜັງສືພິມໄດ້ແຈ້ງວ່າ ຢູ່ໃນການພົບພໍ້ກັນຂອງນັກຮົບສັນຕິພາບຈີນກັບ ຄະນະຜູ້ແທນໄດ້ມີໜ້າ ນາງ ຕົງ ແຂ້ງລິງ. ໃນການຕໍ່ສູ້ທີ່ເກີດຂຶ້ນເປັນປະຈຳ ພາຍໃນພັກກົກມິນຕັງ ຍາມໃດພົນລະຍາໝ້າຍຂອງ ຊຸນ ຢັດເຊນ ກໍຢືນຢູ່ຝ່າຍຊ້າຍສະເໝີ. ພາຍຫລັງລັດຖະປະຫານຂອງຈຽງໄຄເຊັກ, ນາງ ຕົງ ເຂ້ງລິງ ກໍໄດ້ໄປຢູ່ສະຫະພາບ ໂຊ

ວຽດໄລຍະໜຶ່ງ ເພື່ອເປັນການຄັດຄ້ານຕໍ່ການຫ່າງເຫີນຈາກອຸດົມການຂອງ ຊຸນ ຢັດ ເຊັນ. ຫວງອຽນຕັດສິນໃຈວ່າ ແມ່ຍິງຜູ້ນີ້ອາດຈະເຊື່ອຖືໄດ້.

ຫວງອຽນຂຽນຈົດໝາຍໄປຫາ ໂປນ ໄວຢັງ-ກູຕືວຣິເອ ເຖິງວ່າບໍ່ມີລາຍເຊັນກໍຕາມ ແຕ່ໂປນຈະຕ້ອງເດົາອອກໃນທັນທີໂລດວ່າຈົດໝາຍສະບັບນີ້ແມ່ນໃຜເປັນຜູ້ຂຽນ. ຫວງອຽນໄດ້ເຕືອນຄວາມຊົງຈຳຂອງໂປນກ່ຽວກັບຂັ້ນຕອນໃນການພົບພໍ້ກ່ອນໜ້ານີ້ ລະຫວ່າງພວກເຂົາ ຊຶ່ງມີພຽງແຕ່ສອງຄົນເທົ່ານັ້ນຮູ້ຈັກ. ຈາກນັ້ນມາ ຫວງອຽນ ຂີ່ຕັກຊີໄປເຮືອນນາງ ຕົງ ແຂັງລິງ. ນັບຕັ້ງແຕ່ປີ ໑໙໑໙ ຄົນຈີນອົບພະຍົບ ທີ່ເປັນຜູ້ນັບຖື ຊຸນ ຢັດເຊັນ ໄດ້ມອບເຮືອນຫລັງນີ້ໃຫ້ເປັນຂອງຂວັນແກ່ເພິ່ນ ໃນຊ່ວງໄລຍະຫຍຸ້ງຍາກ ສັບສົນທີ່ສຸດໃນຊີວິດຊັດເຊພະເນຈອນຂອງເພິ່ນ. ເມື່ອມາຮອດຕໍ່ໜ້າເຮືອນ, ຫວງອຽນກ້າວລົງຈາກລົດຢ່າງສະຫງ່າຜ່າເຜີຍ, ຍ່າງເຂົ້າໄປຮອດປະຕູຮົ້ວ ແລ້ວກໍປ່ອນຈົດ-ໝາຍລົງໃນຫີບຈົດໝາຍທີ່ມັດຕິດກັບປະຕູຮົ້ວ.

ຕອນເດິກຄືນຕໍ່ມາ ຢູ່ທີ່ສວນສາທາລະນະທີ່ຕັ້ງຢູ່ລະຫວ່າງກາງເຂດຄົນຈີນ ແລະ ເຂດສາກົນ ຫວງອຽນພົບກັບຄົນທີ່ຮູ້ຈັກກັນຄົນທຳອິດນັບແຕ່ມື້ມາຢູ່ຊຽງໄຮ້.

" ຢູ່ຫວຽດນາມມີຄວາມເວົ້າທີ່ວ່າ: ຢູ່ຫ່າງຈາກປະເທດເປັນພັນໆໂຍດກໍຍັງພົບເພື່ອນຮັກນໍ!" ຫວງອຽນຫລົ້ງຮ້ອງໄຫ້ ແລະ ກອດຮັດໂປນ.

" ຟ້າເອີຍ! ຫວງອຽນ, ຂ້ອຍບໍ່ຄິດວ່າຈະໄດ້ພົບເຈົ້າອີກ! ເຂົາຊ່າວ່າ ເຈົ້າຕາຍແລ້ວ, ແມ່ນອນວ່າເຈົ້າຈະມີຊີວິດຍືນຍາວແທ້ໄດ, ຖ້າເຊື່ອສຸພາສິດຂອງປະຊາຊົນຝະລັ່ງ", ໂປນທັງຕອບທັງຕົບຫລັງຂອງຫວງອຽນ. ສ່ວນຫວງອຽນແນມເບິ່ງໂປນ ດ້ວຍຄວາມປະຫລາດໃຈ. ໂປນເວົ້າຕື່ມອີກວ່າ: "ແທ້ໄດ໋ ແມ່ນອນວ່າເຈົ້າຄົງບໍ່ຮູ້ຈັກເລື່ອງນີ້ຊ້ຳ".

ໂປນເລົ່າວ່າ ໄລຍະໜຶ່ງ ພາຍຫລັງທີ່ຫວງອຽນຫລົບໜີອອກຈາກຮົ່ງກົງ ຢ່າງບໍ່ມີຮ່ອງຮອຍ, ໜັງສືພິມຝະລັ່ງຕ່າງກໍລົງຂ່າວກ່ຽວກັບການຕາຍຂອງຕົງເວີນເຊີ ຢູ່ໃນຄຸກຮົ່ງກົງ. ໜັງສືພິມ "ໂອປີນິງ" ຂຽນວ່າ:

" ຫວງອຽນອາຍກວັກ ຫົວໜ້າຂອງພວກໂບນເຊວິກ ທັງເປັນຄົນໂດ່ງດັງ ໂດຍສະເພາະໃນສະໄໝເກີດມີການລຸກຮື້ຂຶ້ນຂອງພວກກອມມູນິດທີ່ຢູ່ອິນດູຈີນ ຂອງຝະລັ່ງນັ້ນ ໄດ້ເຖິງແກ່ມໍລະນະກຳດ້ວຍພະຍາດປອດແຫ້ງຢູ່ໂຮງໝໍຂອງຄຸກ". ໜັງສືພິມຍັງໄດ້ລົງຮູບຖ່າຍຫວງອຽນອາຍກວັກ ແລະ ບົດແຈ້ງຂ່າວມໍລະນະກຳອີກດ້ວຍ, ໃນນັ້ນຍັງໄດ້ແຈ້ງ

ຕາຕະລາງລຳດັບເຫດການໃນການເຄື່ອນໄຫວການເມືອງຂອງຜູ້ຕາຍ. ຫລັງຈາກຊົມເຊີຍຄວາມເກັ່ງກ້າສາມາດໃນການເປັນຜູ້ນຳພາຂອງຫວງວຽນອາຍກວັກ, ໜັງສືພິມຍັງໃຫ້ຂໍ້ສັງເກດດ້ວຍຄວາມເສຍດາຍວ່າ: "ຄົນອານນາມຜູ້ຈ່ອຍຜ່ອນ ທີ່ຫາກໍຕາຍ ຢູ່ໃນໂຮງໝໍຂອງຄຸກທີ່ຮ່ງກົງນີ້ ອາດຈະກາຍເປັນຜູ້ຊ່ວຍທີ່ແທ້ຈິງສຳລັບເພື່ອນຮ່ວມຊາດຂອງເພິ່ນ ກໍຄືສຳລັບປະເທດຝະລັ່ງ ຖ້າວ່າແຕ່ຫົວທີເພິ່ນຫາກໄດ້ເລືອກເອົາເສັ້ນທາງເດີນທີ່ຖືກຕ້ອງ".

ຂ່າວດັ່ງກ່າວພັດຖືກກັບໄລຍະທີ່ສະຫາຍ ເຈີນຟູໄດ້ເສຍຊີວິດຍ້ອນຖືກຕີຢ່າງທໍລະມານຢູ່ໃນຄຸກໄຊ່ງ່ອນ. ໃນຊຸມມື້ນັ້ນ ໜັງສືພິມ "ຊຸຍມານີເຕ" ໄດ້ຂຽນວ່າ " ຄຽງຄູ່ກັບສະຫາຍຫວງວຽນອາຍກວັກ ສະຫາຍເຈີນຟູ ແມ່ນນັກຮົບຜູ້ຍິ່ງໃຫຍ່ຄົນໜຶ່ງໃນອົງການສາກົນຂອງພວກເຮົາ". ໜັງສືພິມໂຊວຽດຕ່າງກໍໄດ້ລົງຂ່າວ ກ່ຽວກັບການເຖິງແກ່ມໍລະນະກຳ ຂອງສອງຜູ້ນຳປະຕິວັດອິນດູຈີນ. ກຸ່ມນັກຮຽນຫວຽດນາມ ຢູ່ມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານພາກຕາເວັນອອກເຊິ່ງໃນນັ້ນມີຫລາຍຄົນ ແມ່ນກະໂຕຫວງວຽນເອງເປັນຜູ້ສົ່ງໄປຮຽນ ອີກຈຳນວນໜຶ່ງເຄີຍຮຽນຮ່ວມກັບເຈີນຟູ ໄດ້ພາກັນທຳພິທີໄວ້ອາໄລເຖິງສອງຜູ້ນຳທີ່ເສຍຊີວິດ. ໃນພິທີດັ່ງກ່າວ ຜູ້ຕາງໜ້າສາກົນກອມມູນິດ ແລະ ຄະນະອຳນວຍການໂຮງຮຽນ ຕ່າງກໍໄດ້ອ່ານກ່າວສູນທອນພົດ.

ບາງທີອາດຈະແມ່ນພວກນັກສືບຝະລັ່ງ ກະຈາຍຂ່າວ ກ່ຽວກັບການຕາຍ ຂອງຫວງວຽນ ດ້ານໜຶ່ງເພື່ອກູ້ໜ້າຂອງຕົນພາຍຫລັງທີ່ປະລາໄຊຢູ່ໃນ "ຄະດີຕົງວັນເຊີ " ແລະ ອີກດ້ານໜຶ່ງ ເພື່ອສ້າງຄວາມກະວົນກະວາຍຢູ່ໃນຖັນແຖວຂອງຂະບວນການກອມມູນິດໃນອິນດູຈີນ.

ອີກປະການໜຶ່ງ ໃນການໃຫ້ສຳພາດແກ່ນັກຂ່າວຂອງສຳນັກຂ່າວຣອຍເຕີ້ ໃນປີ ໑໙໖໙ ເມື່ອ ໂຮ່ຈີມິນເຖິງແກ່ມໍລະນະກຳນັ້ນ, ນາງລົດສະບາຍ ໄດ້ຢັ້ງຢືນວ່າ : ຂ່າວເປົ່າປີ້ວກ່ຽວກັບການຕາຍຂອງຕົງວັນເຊີ ແມ່ນຜົວເມຍສອງຄົນເປັນຜູ້ ກະຈາຍໂດຍມີຈຸດປະສົງຢາກຫລອກລວງພວກນັກສືບຝະລັ່ງ ແລະ ຊ່ວຍເຫລືອຫວງວຽນ ໃຫ້ໄປຮອດຣາໂມນຢ່າງປອດໄພ. ຂໍ້ຢັ້ງຢືນດັ່ງກ່າວຄົງຈະເປັນຄວາມຈິງ.ສ່ວນພວກນັກສືບຝະລັ່ງກໍເຊື່ອຕາມຂ່າວລືທີ່ວ່າ ຫວງວຽນອາຍກວັກ ໄດ້ຕາຍແທ້ຈິງ ເພາະວ່າພາຍຫລັງເຫດການດັ່ງກ່າວ ຊື່ຂອງຫວງວຽນອາຍກວັກ ກໍບໍ່ໄດ້ຖືກເອີ່ຍເຖິງຢູ່ຕາມໜ້າໜັງສືພິມ ຝະລັ່ງ ແລະ ໃນເອກະສານຕ່າງໆຂອງຕຳຫລວດຝະລັ່ງເປັນເວລາດົນນານ. ພຽງແຕ່ມາ

ຮອດຕົ້ນປີ໑໙໔໐ ພະນັກງານຂອງສຳນັກງານນັກສືບຝະລັ່ງຜູ້ໜຶ່ງຢູ່ແຂວງກາວບັງຈຶ່ງລາຍງານໃຫ້ສຳນັກງານນັກສືບຮ່າໂນ້ຍຮູ້ວ່າ ອີງຕາມຂ່າວຊ່າລືທີ່ແຜ່ລາມ ຢູ່ໃນໝູ່ປະຊາຊົນທ້ອງຖິ່ນທີ່ອາໄສຢູ່ນັ້ນ, ຜູ້ນຳການປະຕິວັດໜຶ່ງຊື່ວ່າ ໂຮ່ຈີ້ມິນໄດ້ປະກົດຕົວຂຶ້ນຢູ່ເຂດ ພູດອຍ, ສ່ວນຄົນຈຳນວນໜຶ່ງມີຄວາມເຫັນວ່ານັ້ນຄື ຫງວຽນອາຍກວັກໂຕຈິງ. ນັກສືບຄົນນີ້ໄດ້ຮັບຄຳຕອບວ່າຂ່າວຊ່າລືດັ່ງກ່າວ ບໍ່ມີມູນຄວາມຈິງແຕ່ຢ່າງໃດເລີຍ ທັງນີ້ກໍເພາະວ່າ ຫງວຽນອາຍກວັກໄດ້ຕາຍໄປແຕ່ປີ ໑໙໓໒ ຢູ່ຮົ່ງກົງ.

ດ້ວຍເຫດນັ້ນ ພວກນັກສືບຝະລັ່ງຈຶ່ງໄດ້ລະເຫລີງ (ຫລົງວ່າບໍ່ເຊື່ອ) ບົດຂຽນນ້ອຍໆທີ່ປະກົດຕົວຢູ່ໜ້າໜັງສືພິມ "ໂອປີຍົງ" ຢູ່ໄຊ່ງ່ອນໃນວັນທີ ໗ ເດືອນເມສາ ປີ ໑໙໓໓, ໝາຍຄວາມວ່າ ກົງກັບຊ່ວງໄລຍະທີ່ຫງວຽນອາຍກວັກມີໜ້າຢູ່ຮ່າໂນ້ນ. ບົດຂ່າວດັ່ງກ່າວຂຽນໄວ້ວ່າ: "ຫງວຽນອາຍກວັກ ຜູ້ກໍ່ເຫດການໂສກນາຕະກຳນອງເລືອດປີ ໑໙໓໐, ເປັນຜູ້ທີ່ບັນດາໜັງສືພິມໄດ້ເວົ້າເຖິງການຕາຍ ໃນປີໜຶ່ງຜ່ານມານີ້ ແຕ່ບັດນີ້ປະກົດວ່າມີຊີວິດ ແລະ ຢູ່ຢ່າງອິດສະຫລະ. ຍິ່ງກວ່ານັ້ນ, ຫງວຽນອາຍກວັກຍັງໄດ້ຫລຸດພົ້ນອອກຈາກຄຸກ. ສານຮົ່ງກົງຕັດສິນລົງໂທດຫງວຽນອາຍກວັກ ໂດຍການຈຳຄຸກ ໔ ປີ. ແຕ່ຍ້ອນວ່າເພິ່ນເປັນປອດແຫ້ງໜັກ, ສະນັ້ນຈຶ່ງມີຫລາຍຄົນເຊື່ອວ່າ ເພິ່ນໄດ້ຕາຍຢູ່ໃນຄຸກ, ຄວາມຈິງພັດບໍ່ໄດ້ເປັນດັ່ງຈັ່ງຊັ້ນ..."

"ໂປນ, ສອງປີຜ່ານມາແລ້ວ ທີ່ຂ້ອຍປຽບເໝືອນມີຊີວິດຢູ່ເທິງເກາະແຫ່ງໜຶ່ງທີ່ປາສະຈາກຄົນຢູ່, ຖືກຕັດແຍກອອກຈາກທຸກເຫດການຢູ່ໃນໂລກ, ໂດຍສະເພາະຈາກພາລະກິດຂອງພວກເຮົາ, ຈົ່ງເລົ່າໃຫ້ຂ້ອຍຟັງເບິ່ງດູວ່າ ມີຫຍັງແດ່ໄດ້ເກີດຂຶ້ນ ຢູ່ປະເທດຊາດຂອງຂ້ອຍໃນໄລຍະຜ່ານມາ ?

ເມື່ອຟັງໂປນ ເລົ່າກ່ຽວກັບເຫດການ ອັນເຈັບປວດທໍລະມານ ຢູ່ຫວຽດນາມ, ຫງວຽນຮອງໄຫ້ນ້ຳຕາໄຫລອາບໜ້າ. ການລຸກຮືຂຶ້ນແບບປະຕິວັດຢູ່ເງ້ອານ ແລະ ຮ່າຕິງ ຖືກພວກລ່າເມືອງຂຶ້ນຈຸ່ມຈົມລົງຢູ່ໃຕ້ທະເລເລືອດ. ອຳນາດປົກຄອງຝະລັ່ງໄດ້ ສົ່ງກອງທະຫານຕ່າງດ້າວຫລາຍກອງພັນໃຫຍ່ເຂົ້າໄປປາບປາມການລຸກຮືຂຶ້ນ. ຫລາຍໝູ່ບ້ານທີ່ໄດ້ສ້າງຕັ້ງສະພາໂຊວຽດ ຖືກເຮືອບິນຝະລັ່ງຈູດເຜົາເປັນເທົ່າຖ່ານ.

ພາຍຫລັງການປາບປາມສະພາໂຊວຽດ ເງ້ຕິງ ພວກລ່າເມືອງຂຶ້ນຝະລັ່ງ ໄດ້ເປີດສາກປາບປາມຢ່າງຫລວງຫລາຍໃນທົ່ວປະເທດ. ກ່ອນອື່ນໝົດ ພວກເຂົາປາບປາມ ພັກກອມມູນິດທີ່ຫາກໍກຳເນີດຂຶ້ນ. ຫລາຍໜ່ວຍພັກ ແລະ ອົງການນຳພາຂອງພັກ ຖືກທຳ

ລາຍ. ໃນເດືອນກັນຍາ ປີ ໑໙໓໑ ສະຫາຍເຈີນຟູ ພ້ອມດ້ວຍສະຫາຍອີກຈຳນວນໜຶ່ງ ຢູ່ໃນຄະນະບໍລິຫານງານສູນກາງພັກກໍ່ເສຍຊີວິດ ຍ້ອນການຂາຍຄວາມລັບຂອງຜູ້ທໍລະຍົດ. ໃນປີ ໑໙໓໘ ເລີ່ງເຊີນ ຜູ້ເປັນເພື່ອນທີ່ຈົງຮັກພັກດີຂອງຫງວຽນ ໄດ້ຖືກນຳໄປຕັດຫົວ. ສຸດທ້າຍຄືການຕາຍຂອງຫລີຕືຈອງ, ເຊິ່ງເປັນເຍົາວະຊົນຜູ້ຄ່ອງແຄ້ວ ມີໄສມ່ວນຊື່ນທັງເປັນນັກເຄື່ອນໄຫວໃຕ້ດິນຜູ້ກ້າແກ່ນຄົນໜຶ່ງ ແລະ ເປັນ "ຫລານ" ຮັກແພງທີ່ສຸດຂອງຫງວຽນ. ຢູ່ທີ່ງານຊຸມນຸມມິດຕິງ ຊຶ່ງແມ່ນພັກເປັນຜູ້ຈັດຕັ້ງ, ຫລີ ຕືຈອງ ໄດ້ຍິງນັກສືບຝະລັ່ງຄົນໜຶ່ງຕາຍ ຈາກນັ້ນກໍຖືກຈັບ ແລະ ຖືກຕັດສິນລົງໂທດປະຫານຊີວິດ. ພວກເພັດຊະຄາດບໍ່ເອົາຫົວຊາຕໍ່ອາຍຸທີ່ບໍ່ເຕັມກະສຽນຂອງຜູ້ຮັກຊາດຜູ້ໜຸ່ມນ້ອຍ ເພາະວ່າພວກເຂົາກະຫາຍຢາກແກ້ແຄ້ນລາວໂພດ! ຈອງຜູ້ໜຸ່ມນ້ອຍ ຍ່າງໄປຫາບ່ອນປະຫານຊີວິດຢ່າງອົງອາດພ້ອມທັງຮ້ອງເພງ "ສາກົນກຳມາຊີບ". ສີ່ປີກ່ອນໜ້ານີ້ ຄືແຕ່ຄາວ ຢູ່ກວາງເຈົາ ຫລີ ຕືຈອງ ແລະ ໝູ່ເພື່ອນຮຸ່ນລາວຄາວດຽວກັນ ໄດ້ຮຽນຮ້ອງເພງຂອງຊົນຊັ້ນກຳມາຊີບນຳສະຫາຍ ເວືອງ ເຊິ່ງເປັນຜູ້ແປເນື້ອຮ້ອງອອກເປັນພາສາ ຫວຽດນາມ.

"ໜ້າເສຍໃຈທີ່ສຸດທີ່ວ່າການປະຕິວັດຍາມໃດກໍ່ບໍ່ອາດຫລີກເວັ້ນຈາກຄວາມເສຍຫາຍໄດ້", ໂປນເວົ້າອອກມາດ້ວຍຄວາມເຈັບແສບ. "ແຕ່ພັກກອມມູນິດອິນດູຈີນກໍຍັງມີຊີວິດ ແລະ ກຳລັງເຄື່ອນໄຫວ. ພວກຂ້າພະເຈົ້າມີຂໍ້ມູນທີ່ບອກໃຫ້ຮູ້ວ່າ ຢູ່ໃນຕົວເມືອງສຳຄັນຂອງຫວຽດນາມ ອົງຄະນະພັກໄດ້ຖືກຟື້ນຟູແລ້ວ ທີ່ຈົງຂອງພັກກອມມູນິດ ຝະລັ່ງກໍໄດ້ຮັບການປັບປຸງຄືນຢູ່ຝະລັ່ງ. ຢູ່ລັດເຊຍ ການກໍ່ສ້າງສັງຄົມນິຍົມກຳລັງຂະຫຍາຍຕົວ ຢ່າງຟົດຟື້ນ ຢູ່ທົ່ວປະເທດ. ຫງວຽນເຄີຍໄດ້ຍິນບາງສັບໃໝ່ໆເຊັ່ນ ການຫັນເປັນຊຸດສາຫະກຳ, ການຫັນເປັນລວມໝູ່, ແຜນການຫ້າປີບໍ ? ອີກບໍ່ດົນ ເຈົ້າຈະໄດ້ເຫັນດ້ວຍຕາຂອງຕົນເອງວ່າ ການປ່ຽນແປງອັນໃຫຍ່ຫລວງທີ່ຊ່ອນຢູ່ໃນສັບເຫລົ່ານັ້ນ ເປັນຄືແນວໃດ .

ສອງສາມມື້ຕໍ່ມາ ພາຍຫລັງການພົບປະກັບໂປນ ໄວຢັງ-ກູຕົວຣິເອ, ມີຄົນ ຜູ້ໜຶ່ງມາພົບຫງວຽນ ແລະ ນຳເອົາຄວາມຢ້ຽມຢາມຖາມຂ່າວຈາກບັນດາສະຫາຍ ຂອງຫງວຽນມາໃຫ້ເພິ່ນ. ສາຍຕິດຕໍ່ຊຶ່ງໄດ້ຄອງຄອຍມານານແສນນານນັ້ນ ມາບັດນີ້ ໄດ້ຮັບການຟື້ນຊີບ, ຖ້າບໍ່ມີສາຍຕິດຕໍ່ດັ່ງກ່າວແລ້ວນັກເຄື່ອນໄຫວໃຕ້ດິນ ໃນຕົວຈິງແລ້ວ ບໍ່ສາມາດເຄື່ອນໄຫວຢ່າງຕັ້ງໜ້າໄດ້ເລີຍ.



ຫງວຽນ ຊິງສັກ ພໍ່ຂອງໂຮ່ຈີມິນ.

24 / VII

ເຮືອນທີ່ ໂຮ່ຈີມິນ ອາໄສຢູ່ເມື່ອຄາວຍັງນ້ອຍ.

ຫ້າມຈຳໜ່າຍ

ຟານໂບ້ຍເຈົາ (໑໘໖໗-໑໙໔໐).



ຟານຈູຈິງ (໑໘໗໒-໑໙໒໖).

ກຳປັ່ນລຳທີ່ບັນທຸກ ໂຮ່ຈິມິນໜຸ່ມໄປສູ່ແດນໄກເມື່ອເດືອນ ມິຖຸນາ ໑໙໑໑.



ໂຮ່ຈິມິນ ເມື່ອຄາວຢູ່ທີ່ປະເທດຝະລັ່ງ (໑໙໒໐).

ໂຮ່ຈິມິນ ກ່າວຄຳປາໄສ ຢູ່ທີ່ກອງປະຊຸມໃຫຍ່ຂອງພັກກອມມູນິດຝະລັ່ງ ທີ່ເມືອງ
ຕວກ (໑໙໒໐).

ADMINISTRATION
PARIS

le Paria 報 働 勞

Tribune du Prolétariat Colonial

Faillite Parlementaire et Colonies

TÊTES A GIFFLES

Le colonel Fabry, ministre

Indochine et Pacifique

L'Exploitation intensifiée des Annamites

ຫນັງສືພິມ ສະບັບຫນຶ່ງ ຂອງ "ປາຣີຢາ".

ຢູ່ບົນຫນ້າຫນັງສືພິມ "ປາຣີຢາ" ມັກມີຮູບແຕ້ມ ສຽດສີ ຂອງໂຮ່ຈີມິນ ປະກົດອອກເລື້ອຍໆ.

ໂຮ່ຈີມິນ ເມື່ອປີ ໑໙໒໓, ເມື່ອເວລາເພິ່ນເດີນທາງໄປຮອດປະເທດລັດເຊຍ ໂຊວຽດ ເປັນເທື່ອທຳອິດ.



Nguyên-Aï-Quôc

محاكمة الاستعمار الافرنسي

法國殖民市業中之審判行為

LE PROCÈS
de la
Colonisation Française

• Première Série •

Mœurs Coloniales

LIBRAIRIE DU TRAVAIL, Quai de Jemmapes, 96 - PARIS

ໜ້າທຳອິດຂອງປຶ້ມຫົວທຳອິດ ຂອງໂຮ່ຈີ້ມິນ ທີ່ມີຊື່ວ່າ "ສານກ່າວຟ້ອງລະບອບ ລ່າເມືອງຂຶ້ນຝະລັ່ງ" (໑໙໒໕).

ໂຮ່ຈີ້ມິນ ທ່ານກາງ ຜູ້ແທນ ຂອງກອງປະຊຸມໃຫຍ່ ສາກົນກອມມູນິດ ແຖວໜ້າ ເບື້ອງຊ້າຍມື.

ໂຮ່ຈິມິນ ເມື່ອຄາວຢູ່ ກວາງ
ເຈົາ (໑໙໒໕-໑໙໒໗).

(Không phải sách bán)
Quyển thứ....

Dường
Kách mệnh

Không có lý-luận. Kách mệnh, thì không có kách mệnh vận-động.... Chỉ có theo lý-luận kách-mệnh tiền-phong, đảng kách-mệnh mới làm nổi trách-nhiệm kách mệnh tiền-phong.

Lô-nin.

Bị Áp Bức Dân Tộc Liên Hợp Hội Tuyên Truyền Bộ
Ấn-Hành

ໜ້າທຳອິດຂອງປຶ້ມຂອງໂຮ່
ຈິມິນ "ເສັ້ນທາງປະຕິວັດ".

ເຈີນຟູ ເລຂາທິການໃຫຍ່ຜູ້ທຳອິດ ຂອງຄະນະກຳມະການສູນກາງພັກ ກອມມູນິດອິນດູຈີນ.

ເລຮົ່ງຟອງ.

ນາທີທຳອິດຂອງໂຮ່ຈີມິນຢູ່ບົນບ້ານເກີດເມືອງນອນຫລັງຈາກທີ່ຈາກໄປເປັນເວລາ ៣០ ປີ (ຮູບແຕ້ມຂອງຈິມຟອງ).



ຫງວຽນ ທິ ມິງຄາຍ.

ສະຫາຍ ເລຢວນ ເມື່ອຊຸມປີ ໓໐.

ຕົ້ນໄຮອັນລືຊື່ຢູ່ທີ່ ເຕີນຈາວ.

ຢູ່ໃນຕູບກາງປ່າ ທີ່ມີສະພາບແນວນັ້ນ ແຫລະທີ່ເປັນບ່ອນຮັບຮອງເອົາມະຕິວ່າດ້ວຍການສ້າງຕັ້ງແນວໂຮມຫວຽດມິນ.

ຫນ່ວຍໂຄສະນາແມ່ນຫນ່ວຍປະກອບອາວຸດຫນ່ວຍທຳອິດຂອງການປະຕິວັດຫວຽດນາມ. ຢູ່ເບື້ອງຊ້າຍມືແມ່ນສະຫາຍ ວໍຫງວຽນຢາບ.

ຊຸມນຸມແຫ່ງເດືອນສິງຫາ ໑໙໔໕ ຢູ່ທີ່ຮ່າໂນ້ຍ.

ເປັນປະທານປະເທດ ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ.

ໂຮ່ຈີມິນ ເມື່ອເດືອນກັນຍາ ປີ ໑໙໔໕.



ໂຮ່ຈິມິນ ໃນສາຍຕາຂອງຄົນຝະລັ່ງ ໃນເດືອນພຶດສະພາ ປີ ໑໙໔໖.

ຢູ່ທີ່ຈຸດສັງເກດການໃນຂຸມປີ ແຫ່ງສົງຄາມຕໍ່ຕ້ານ(໑໙໕໐).

ໂຮ່ຈິມິນ ແມ່ນນັກຍ່າງເກັ່ງ.

ຢູ່ໃນຖ້ຳຂອງເຂດຫວຽດບັກ.

ຄຳແນະນຳກ່ອນອອກສູ້ຮົບ.

ກ່ອນໜ້າການສູ້ຮົບ ຄັ້ງປະຫວັດສາດທີ່ ດຽນບຽນຟູ.

ທຸງ ຂອງ ສປຫວ ຢູ່ເໜືອຂຸມຄອງຂອງນາຍພົນເດີ ກາສະຕຣີ.



ຈັກພິມດີດ "ເກຣເນສ-ເບເບ" ເພື່ອນຮ່ວມສຸກຮ່ວມທຸກ.

ໜຶ່ງໃນຈຳນວນກອງປະຊຸມຄັ້ງສຸດທ້າຍຂອງລັດຖະບານ ສປຫວ ຢູ່ທີ່ຫວຽດບັກ.



ໂຮ່ຈິມິນ ໃນມື້ໄດ້ຮັບໄຊຊະນະ ໃນປີ ໑໙໕໔.



"ກອງພັນປ້ອງກັນນະຄອນຫລວງ" ອັນເກ່ງກ້າ ກັບຄືນສູ່ຖະຫນົນຫົນທາງຂອງຮ່າໂນ້ຍອີກ.

ຄວາມເບີກບານ ຂອງການ ອອກແຮງງານ ຢູ່ໃນ ສັນຕິ ພາບແລະໃນການສ້າງສາ.

24 / VII
ห้ามจำหน่าย

ໂຮ່ຈີມິນຮັກເດັກນ້ອຍຫລາຍທີ່ສຸດ.

ຢູ່ໃນສວນ ຂອງທຳນຽບປະທານປະເທດ.

ປ້ຽນຍາມເຍົາວະຊົນໂຊວຽດ.



ໂຮ່ຈີມິນ ແລະ ໂຕນດຶກຖັງ
ຢູ່ທີ່ສະໄໝປະຊຸມຂອງ ສະ
ພາແຫ່ງຊາດຂອງ ສປຫວ.

ຢູ່ທີ່ຫ້ອງເຮັດວຽກ ຂອງວ.ອິ.ເລນິນ ນະວັງແກຣມແລັງ.

ໂຮ່ຈີມິນ ໃນຊຸມປີ ໕໐.

ປະທານສະພາປ້ອງກັນຊາດ
ສູງສຸດແຫ່ງ ສປຫວ ຢ້ຽມ
ຢາມກອງທັບເຮືອ.

ການພົບປະກັບບັນດານັກຮົບວິລະຊົນຂອງຫວຽດນາມພາກໃຕ້.

ທີ່ຕັ້ງຂອງກອງຕໍ່ຕ້ານ ອາກາສະຍານ.

ນັກບິນຜູ້ນີ້ໄດ້ຍິງເຮືອບິນ "ຟານໂຕມ" ຂອງສັດຕູຕົກ.

ຊາວເມືອງຮ່າໂນ້ຍ ທຳພິທີໄວ້ອາໄລ ເຖິງໂຮ່ຈີ໋ມິນ.

ແຖວອັນຍາວຢຽດຂອງຜູ້ຄົນທີ່ເຂົ້າຄຳນັບ ສຸສານ ໂຮ່ຈີ໋ມິນ ທີ່ສະຫນາມ ບາດິງ ຂອງ ຮ່າໂນ້ຍ.

ກຳປັ່ນໂຊວຽດທີ່ມີຊື່ວ່າ "ໂຮ່ຈີມິນ" ທ່ຽວມາຈອດຢູ່ທ່າເຮືອ ຫວຽດນາມຢູ່ເລື້ອຍໆ.

ໄຊ່ງ່ອນໃນອະດີດແມ່ນໂຮ່ຈີມິນໃນປະຈຸບັນ.



24/VII

ໂຮ່ຈີມິນ ໃນຄວາມຊົງຈຳຂອງຫວຽດນາມ.

ພາຍລູນມາ ທຸກໆວຽກງານລ້ວນແຕ່ງ່າຍດາຍດີຢູ່ໃນນິທານບູຮານ. ກຳປັ່ນ ບັນທຸກສິນຄ້າລຳໜຶ່ງຂອງໂຊວຽດມາຈອດທີ່ທ່າເຮືອຊຽງໄຮ້ ເພື່ອສ້ອມແປງເລັກນ້ອຍ. ກັບຕັນເຮືອໄດ້ຮັບແຈ້ງ ລ່ວງໜ້າວ່າ ຕ້ອງຮັບເອົາຄົນໂດຍສານຜູ້ໜຶ່ງຂຶ້ນກຳປັ່ນ. ມືດຊຸ້ມຕອນຄ່ຳວັນໜຶ່ງ, ເຮືອທີ່ຫວງວຽນຂີ່ມາໄດ້ຫຍັບເຂົ້າໄປຂ້າງກຳປັ່ນທາງກ້ຳທະເລ ຂັ້ນໄດກຳປັ່ນໄດ້ຖືກປ່ອນລົງນ້ຳຖ້າຢູ່ກ່ອນແລ້ວ. ຫລັງຈາກທີ່ລອຍລຳຢູ່ກາງທະເລບໍ່ດົນ, ກຳປັ່ນກໍມຸ່ງໜ້າເຂົ້າສູ່ອ່າວ "ເອົາຄຳ" ອັນສວຍງາມ. ທັດສະນີຍະພາບທັງໝົດຂອງວາລະດິວົດສະຕົກ ທີ່ເນີ່ງຍາວໄປຕາມສາຍພູເຕ້ຍໆ ໄດ້ປະກົດຕົວຢູ່ຕໍ່ໜ້າຫວງວຽນ.

ບ້ານເກີດເມືອງນອນແຫ່ງທີສອງ

໑

ຈາກສະຖານີລົດໄຟ ເອຍຣົດສະລາບສະກີ ທາງວຽນ ຍ່າງຜ່ານສະໜາມຫລວງອັນກວ້າງໃຫຍ່ສຸດຕາ, ແນມເບິ່ງຫໍນາລິກາທີ່ໜ້າປະຫລາດແລະອາຄານຫລັງໃຫຍ່ຂອງສະຖານີລົດໄຟ ກາຊານສະກີ, ເພິ່ນມີຄວາມຮູ້ສຶກວ່າ ຕົນເອງຫາກໍອອກຫວິດ ຈາກເມືອງແຫ່ງນີ້ໃນມື້ວານນີ້.

ມົດສະກູວັນນີ້ ກໍເຊັ່ນດຽວກັນກັບເຈັດປີກ່ອນ ເມື່ອທາງວຽນ ໄດ້ເຫັນຄັ້ງຫລັງສຸດນີ້ ແລະ ຂະນະດຽວກັນ ພັດມີສິ່ງໃດສິ່ງໜຶ່ງທີ່ປ່ຽນແປງຈົນຈື່ບໍ່ໄດ້. ຢູ່ທົ່ວທຸກ ແຫ່ງທາງວຽນ ໄດ້ສັງເກດເຫັນສັນຍາລັກແຫ່ງການປ່ຽນແປງໃໝ່. ຖ້າສົມທຽບກັບເມື່ອກ່ອນແລ້ວ, ຢູ່ຕາມຖະໜົນມີຍານພາຫະນະຫລາຍກວ່າແຕ່ກ່ອນ. ຢູ່ສະໜາມລະຫວ່າງກາງສະຖານີລົດໄຟສາມສະຖານີ ເປັນບ່ອນດຳເນີນກິດຈະການກໍ່ສ້າງທາງລົດໄຟໃຕ້ດິນ ຊຶ່ງມີຮົ້ວໄມ້ ອ້ອມຮອບໄວ້.

ຢູ່ຖະໜົນ ໂອຄົດນີຍ, ຫວຽນ ແນມບໍ່ເຫັນໂບດທີ່ເຄີຍເຫັນມາກ່ອນນັ້ນ ອີກແລ້ວ, ສ່ວນຢູ່ກ້ຳຊາຍ, ບ່ອນທີ່ເມື່ອກ່ອນນີ້ມີຣ້ານຄາເກົ່າ ແຕ່ບັດນີ້ພັດເປັນບ່ອນ ຄາດຫ້າງຂອງໂຮງແຮມຫລັງໜຶ່ງຊຶ່ງກຳລັງຢູ່ໃນລະຫວ່າງການກໍ່ສ້າງ. ຢູ່ຕາມຖະໜົນ ຕະແວກສະກາຢາ, ນອກຈາກລົດລາງທີ່ແລ່ນສຽງດັງເນື່ອງນັນຢູ່ນັ້ນ, ຍັງມີລົດເມ ແລະລົດເມໄຟຟ້າຄັນທຳອິດ. ຢູ່ແຈຮ່ອມກາແຊດນີ ຊຶ່ງເປັນບ່ອນທີ່ເມື່ອກ່ອນນີ້ ຫວຽນ ຈື່ໄດ້ວ່າ ມີຝາກໍ່ດ້ວຍດິນຈີ່ຂອງໂຮງຮູບເງົາແຫ່ງໜຶ່ງທີ່ຍັງກໍ່ສ້າງບໍ່ສຳເລັດ ແລະທັງເປັນບ່ອນອາໄສຂອງເດັກຈໍລະຈັດ ແຕ່ດຽວນີ້ແມ່ນຕຶກໃຫຍ່ຂອງໂຮງການໄປສະນີ ໂທລະເລກ.

ແຕ່ການປ່ຽນແປງໃນຊີວິດຂອງປະຊາຊົນໂຊວຽດ ຍິ່ງໃຫຍ່ໂຕມະໂຫຖານກວ່າ. ຢູ່ຕາມປ້າຍຄຳຂວັນແຄວເຮືອຈົນນັບບໍ່ຖ້ວນ ຢູ່ຕາມໜ້າທຳອິດຂອງໜັງສືພິມ ຫວຽນໄດ້ອ່ານຄຳຂວັນ ແລະ ຄຳຮຽກຮ້ອງທີ່ປຸກລະດົມຄວາມກະຕືລືລົ້ນ ແລະ ຄວາມຊື່ນຊົມ: "ເດັດດ່ຽວສຳເລັດແຜນການຫ້າປີໃນໄລຍະ ໔ ປີ!", "ທຸກສິ່ງທຸກຢ່າງ ເພື່ອການຫັນເປັນອຸດສາຫະກຳ!", "ອະນາຄົດຕົກເປັນຂອງນິຄົມລວມໝູ່!", "ທຸກສິ່ງທຸກຢ່າງຂຶ້ນກັບພະນັກງານ!".

ແຜນການຫ້າປີກຳລັງກ້າວເຂົ້າເປັນປີທີສອງ. ບັນຫາທີ່ວ່າ "ໃຜຈະຊະນະໃຜ? ໄດ້ຖືກແກ້ໄຂຢ່າງມີຜົນໃຫ້ແກ່ສັງຄົມນິຍົມ. ໜ້າທີ່ໃນປະຈຸບັນຄື: ລົບລ້າງຢ່າງສິ້ນເຊີງຊົນຊັ້ນຂູດຣີດທັງໝົດ, ດັບສູນຢ່າງເດັດຂາດ ສາເຫດທີ່ພາໃຫ້ເກີດລະບອບຄົນ ຂູດຣີດຄົນ, ກໍ່ສ້າງສັງຄົມນິຍົມ. ອີງຕາມແນວທາງຂອງ ເລນິນ ທີ່ແນໃສ່ການຫັນເປັນອຸດສາຫະກຳທົ່ວປະເທດ, ແຜນການຫ້າປີເທື່ອທີສອງ ໄດ້ຄາດຄະເນຈັງຫວະ ແຫ່ງການຂະຫຍາຍຕົວ ທີ່ບໍ່ເຄີຍເຫັນມາກ່ອນຢູ່ໃນຂົງເຂດການຜະລິດພາຫະນະການຜະລິດ, ເກືອບສອງເທົ່າ ເມື່ອສົມທຽບໃສ່ແຜນການເທື່ອກ່ອນ. ໜັງສືພິມຍົກຊື່ບາງກິດຈະການກໍ່ສ້າງຕະລຸມບອນຂຶ້ນມາເວົ້າເຊັ່ນ ມາກນິດກາ, "ໂຮງງານຫລອມເຫລັກ ອາຊົບ", "ໂຮງງານຫລອມເຫລັກ ຊາໂປໂຣຊີເອ", "ໂຮງງານຜະລິດເຄື່ອງຈັກ ອູຣານ". ຢູ່ທົ່ວຊົນນະບົດລ້ວນແຕ່ກ້າວເຂົ້າສູ່ເສັ້ນທາງກໍ່ສ້າງສັງຄົມນິຍົມຢ່າງຂາດຂັ້ນ: ທົ່ວທຸກແຫ່ງຫົນບົນດິນແດນອັນກວ້າງໃຫຍ່ໄພສານ ນັບມື້ນັບປະກົດມີນິຄົມລວມໝູ່ຂຶ້ນໃໝ່ຢ່າງແຜ່ຫລາຍ . ການບຸກເບີກຂົ້ວໂລກເໜືອເລີ່ມປະຕິບັດຢ່າງວ່ອງໄວ. ວິລະກຳອັນສະຫວ່າງ ສະໄຫວຂອງລູກເຮືອ ຂອງກຳປັ່ນ "ແຈລິວສະກິນ" ແລະ ຊື່ຂອງນັກບິນ ທີ່ໄດ້ຮັບນາມມະຍົດ

ເປັນວິລະຊົນໂຊວຽດຄົນທຳອິດ ຊຶ່ງໄດ້ຊ່ວຍຊີວິດເຂົາເຈົ້ານັ້ນ ຍັງມີຄົນເວົ້າເຖິງ ຢ່າງກວ້າງຂວາງ.

ພາຍຫລັງສອງປີທີ່ດຳລົງຊີວິດຢູ່ຢ່າງທຸກທໍລະມານ ໃນຄຸກຈັກກະພັດອັງກິດ, ຫລັງຈາກທີ່ໝົດຊີວິດຢ່າງລີ້ລັບຢູ່ ຣາໂມນ ແລະ ຊຽງໄຮ, ຫລັງຈາກໄດ້ຮັບ ຄວາມສະເທືອນໃຈຢ່າງເລິກເຊິ່ງຕໍ່ການເສຍຊີວິດຂອງສະມາຊິກພັກຜູ້ດີເດັ່ນ, ເພື່ອນຮ່ວມຮົບ, ເພື່ອນມິດ ແລະ ລູກສິດ, ສິ່ງທັງໝົດທີ່ ຫວຽນ ໄດ້ເຫັນຢູ່ອ້ອມຮອບຕົວບົນດິນແດນໂຊວຽດນັ້ນ ຈຶ່ງບໍ່ຕ່າງຫຍັງກັບຢາປົວພະຍາດຊະນິດໜຶ່ງ ທີ່ໂຮຍໃສ່ບາດແຜທີ່ກຳລັງມີເລືອດໄຫຼອອກ, ມັນໄດ້ນຳເອົາຊີວະກຳລັງ ແລະ ພະລັງແຮງໃໝ່ ກໍຄືຄວາມເຊື່ອໝັ້ນ ມາສູ່ຫວຽນ.

ຢູ່ທີ່ຄະນະເລຂາພາກຕາເວັນອອກທີ່ຂຶ້ນກັບຄະນະບໍລິຫານງານສາກົນ ກອມມູນິດ ຫວຽນອາຍກວັກ ຖືກຕ້ອນຮັບຢ່າງອົບອຸ່ນ ບໍ່ຕ່າງຫຍັງກັບການຕ້ອນຮັບວິລະຊົນຜູ້ໜຶ່ງ. ຕາງໜ້າພະນັກງານຂອງຄະນະເລຂາພາກຕາເວັນອອກ, ໂດຍແມ່ນ ໂອ. ເວ. ກູຊິຊິ-ເນັນເປັນຫົວໜ້າຄະນະໄດ້ຄຳນັບຮັບຕ້ອນຫວຽນຢ່າງສຸດຈິດສຸດໃຈ. ສະມາຊິກ ຂອງສາກົນກອມມູນິດ ກໍຄືກັນກັບທົ່ວປວງຊົນໂຊວຽດ ກຳລັງລະນຶກເຖິງການຕໍ່ສູ້ອັນຍິ່ງໃຫຍ່ທີ່ເກີດຂຶ້ນຢູ່ທົ່ວໂລກ ເພື່ອກອບກູ້ເອົາ ເຊອອກຊີ ດີມີຕະຣົບ, ໂປປົບ ແລະ ຕາແຍບ ນັກຮົບຕ້ານຟາດຊິດຄົນບູນກາຣີ ທີ່ຖືກນຳຕົວຂຶ້ນສານຢູ່ທີ່ ແລັບຊິກ. ການຕໍ່ສູ້ດັ່ງກ່າວໄດ້ຈົບລົງດ້ວຍໄຊຊະນະອັນຍິ່ງໃຫຍ່ຄື ເຊອອກຊີ ດີມີຕະຣົບ ເຊັ່ນດຽວກັບເພື່ອນຂອງເພິ່ນໄດ້ຖືກປ່ອຍຕົວ ແລະ ກຳລັງພັກອາໄສຢູ່ສະຫະພາບໂຊວຽດ. ມາບັດນີ້ ຢູ່ມົດສະກູ ຍັງມີຄົນອີກຜູ້ໜຶ່ງທີ່ມາຈາກພາກຕາເວັນອອກໄກ, ເຊິ່ງເປັນພະຍານທີ່ມີຊີວິດຊີວາຂອງພະລັງແຫ່ງນ້ຳໃຈສາມັກຄີສາກົນກຳມາຊີບ. ຄົນຜູ້ນັ້ນມີສຸຂະພາບບໍ່ດີປານໃດ ຂາດເຫື່ອ - ແຮງ, ມີແກ້ມແດງຄືຄົນເປັນໄຂ້ຊ້ຳເຮື້ອ ແຕ່ເບິ່ງທີ່ດວງຕາທັງຄູ່ພັດມີແວວ ແຫ່ງຄວາມສຸກ ແລະ ທີ່ມີຮອຍຍິ້ມອັນເປີດເຜີຍຢູ່ຕະຫລອດເວລາ.

ອີງຕາມຄຳຮຽກຮ້ອງຂອງຄະນະເລຂາພາກຕາເວັນອອກຫວຽນອາຍກວັກ ຖືກສົ່ງໄປປິ່ນປົວຢູ່ ກຣີເມ ເພາະວ່າຕ້ອງໃຊ້ເວລາດົນນານເພື່ອປິ່ນປົວປອດຂອງຫວຽນ. ຫລັງຈາກພັກຜ່ອນໄດ້ພຽງແຕ່ສອງສາມອາທິດ ແລະ ມີສຸຂະພາບປົກກະຕິແລ້ວ ຫວຽນອາຍກວັກ ກໍກັບມາມົດສະກູ, ແລະ ສືບຕໍ່ປະຕິບັດວຽກງານອັນຊິນເຄີຍຂອງນັກປະຕິວັດອາຊີບຮ່ວມກັບໝູ່ເພື່ອນ.

ອີງຕາມຄຳແນະນຳຂອງຄະນະບໍລິຫານງານສາກົນກອມມູນິດໃນວັນທີ ໑ ເດືອນ ຕຸລາ ຫວອງຽນອາຍກວັກ ເຂົ້າຮຽນຢູ່ໂຮງຮຽນລະຫວ່າງຊາດ ເລນິນຊຶ່ງເປັນໂຮງຮຽນ ສອນສະເພາະນັກກອມມູນິດຕ່າງປະເທດ. ໃນໃບສອບຖາມກ່ຽວກັບຊີວະປະຫວັດຫຍໍ້ , ຫວອງຽນອາຍກວັກ ຂຽນໄວ້ວ່າ ຖານະທາງສັງຄົມ-ນັກປະຕິວັດ, ອາຊີບຕົ້ນຕໍ- ພະນັກ ງານພັກ. ເມື່ອໄດ້ເປັນນັກຮຽນຂອງໂຮງຮຽນລະຫວ່າງຊາດ ເລນິນ, ຫວອງຽນອາຍ ກວັກ ຕັ້ງນາມແຝງໃຫມ່ວ່າ: ລີນົບ. ໃນຕະຫລອດໄລຍະທີ່ຢູ່ສະຫະພາບໂຊວຽດຫວອງຽນ ອາຍກວັກ ໄດ້ໃສ່ຊື່ດັ່ງກ່າວ.

ນັບຕັ້ງແຕ່ມື້ທຳອິດຂອງການຮ່ຳຮຽນ ລີນົບ ໄດ້ກາຍເປັນຜູ້ນຳພາ ສະມາຄົມ ເພື່ອນຮ່ວມຊາດ ຂອງນັກປະຕິວັດຫວຽດນາມ. ສຳລັບຫລາຍໆຄົນແລ້ວ ລີນົບ ບໍ່ພຽງ ແຕ່ເປັນຫວອງຽນອາຍກວັກ ທີ່ລືຊາພາກົດເທົ່ານັ້ນ, ແຕ່ຫາກຍັງເປັນສະຫາຍທີ່ມີອາຍຸແກ່ ກວ່າ. ໄລຍະນີ້, ສະມາຄົມເພື່ອນຮ່ວມຊາດຫວຽດນາມຢູ່ມົດສະກູ ມີສະມາຊິກຫລາຍ ສິບຄົນ. ຄົນຫວຽດນາມຈຳນວນຫນຶ່ງຮັດວຽກຢູ່ໃນຄະນະເລຂາພາກຕາເວັນອອກ ທີ່ ຂຶ້ນກັບຄະນະບໍລິຫານງານສາກົນກອມມູນິດ, ອີກຈຳນວນຫນຶ່ງກຳລັງຮຽນຢູ່ໂຮງຮຽນລະ ຫວ່າງຊາດ ເລນິນ, ມີຫລາຍຄົນເປັນພິເສດທີ່ຮ່ຳຮຽນຢູ່ສະຖາບັນຄົ້ນຄວ້າບັນຫາ ຊົນ ຊາດ ແລະ ເມືອງຂຶ້ນ ຊຶ່ງສ້າງຕັ້ງຂຶ້ນໃນປີ ໑໙໒໘ ບົນພື້ນຖານພະແນກ ຂອງຜູ້ຕາງ ຫນ້າເມືອງຂຶ້ນ ຂອງມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານ ຂອງພາກ ຕາເວັນອອກ. ຫວອງຽນແຂງຕອນ ຜູ້ອາວຸໂສຂອງພັກກອມມູນິດຫວຽດນາມ ຊຶ່ງໃນຊຸມປີ ດັ່ງກ່າວເຄີຍສຶກສາຢູ່ທີ່ ມົດສະກູ ໄດ້ເລົ່າຄືນວ່າ:

"ມີເທື່ອຫນຶ່ງ ຂ້າພະເຈົ້າ ແລະ ສະຫາຍຫວຽດນາມອີກຄົນຫນຶ່ງ ຖືກຮຽກ ຕົວ ມາທີ່ຄະນະເລຂາພາກຕາເວັນອອກ ທີ່ຂຶ້ນກັບຄະນະບໍລິຫານງານ ສາກົນກອມມູນິດ ທີ່ຕັ້ງຢູ່ຕຶກຫລັງຫນຶ່ງຂອງຖະຫນົນ ໂມໂຄວາຢາ. ພວກຂ້າພະເຈົ້າໄດ້ພົບ ຫວອງຽນອາຍ ກວັກ ຢ່າງບໍ່ຄາດຄິດມາກ່ອນ ຢູ່ຫ້ອງທຳງານຂອງນາງ ວ.ວາຊີເລຍເຢວາ ຊຶ່ງເປັນຜູ້ ຮັບຜິດຊອບກ່ຽວກັບອິນດູຈີນ.

ແຕ່ນັ້ນມາ ເພິ່ນເປັນຜູ້ນຳກຸ່ມນັກຮຽນຫວຽດນາມ ຢູ່ສະຖາບັນຄົ້ນຄວ້າ ບັນຫາ ຊົນຊາດ ແລະ ເມືອງຂຶ້ນ. ເພິ່ນຕິດພັນກັບກຸ່ມຄົນຫວຽດນາມຢ່າງສະຫນິດແຫນ້ນ. ຕາມ ປົກກະຕິແມ່ນຕອນຄ່ຳ ເພິ່ນໄດ້ມາຖ່າຍທອດບົດຮຽນຕໍ່ສູ້ປະຕິວັດທີ່ອຸດົມຮັ່ງມີໃຫ້ນັກປະຕິ- ວັດຜູ້ຫນຸ່ມນ້ອຍ, ໂດຍເຮັດໃຫ້ອາຍນ້ອງເອົາໃຈໃສ່ນຳຄວາມສຳຄັນຂອງສິນທຳປະຕິວັດ

ແລະໂດຍສະເພາະນ້ຳໃຈສາມັກຄີ. ບາງຄັ້ງບາງຄາວ ໃນໝູ່ອ້າຍນ້ອງຜູ້ມີອາຍຸນ້ອຍທີ່ສຸດ ມັກເກີດມີການຜິດຂ້ອງຕ້ອງຖຽງກັນ ຍ້ອນຄວາມໃຈຮ້ອນ ແລະ ຄວາມທະນົງຕົວ. ຕາມທຳມະດາແລ້ວ ເພິ່ນເປັນຜູ້ຕັດສິນວ່າໃຜຜິດໃຜຖືກໃນການຜິດຂ້ອງຕ້ອງຖຽງກັນດັ່ງກ່າວ. ສິ່ງທີ່ເພິ່ນຢາກເຮັດໃຫ້ອ້າຍນ້ອງຊາບຊຶມດີ ຕ້ອງລົບລ້າງນິໄສອວດອົ່ງທະນົງຕົວ ຕໍ່ສູ້ຕ້ານແນວຄິດເຫັນແກ່ຕົວ ແລະ ຖືຕົນເປັນໃຈກາງ, ແນວຄິດບໍ່ມັນບຖື ລະບຽບວິໄນ ແລະ ແນວຄິດ ອະນາທິປະໄຕ, ຍາມໃດກໍຕ້ອງຮັດແໜ້ນຄວາມສາມັກຄີ, ຖືຜົນປະໂຫຍດປະຕິວັດເປັນສິ່ງທີ່ຢູ່ເໜືອສິ່ງອື່ນໃດ".

ຕາມຄຳເວົ້າຂອງຫງວຽນແຂງຕອນ ນັ້ນເຖິງແມ່ນວ່າສະຫາຍ ລີມົບ ມີອາຍຸສູງກວ່າຄົນຫວຽດນາມອື່ນໆກໍຕາມ ແຕ່ຍາມໃດເພິ່ນກໍຍັງເຂົ້າຮ່ວມວຽກງານ ວັດທະນະທຳສັງຄົມຢ່າງຕັ້ງໜ້າ. ເພິ່ນຂຽນບົດຄວາມສຳລັບໜັງສືພິມຕິດຝາ, ເຂົ້າຮ່ວມ ການສະແດງສິລະປະສະໝັກຫລິ້ນ, ຢ້ຽມຢາມຫໍພິພິດທະພັນ, ຍ່າງເລາະຫລິ້ນນຳໝູ່ແລະ ແປເອກະສານຂອງສາກົນກອມມູນິດມາເປັນພາສາຫວຽດນາມ.

ຫງວຽນອາຍກວັກ ເອົາໃຈໃສ່ເປັນພິເສດຕໍ່ການສຶກສາຮ່ຳຮຽນຂອງຄົນ ຫວຽດນາມ ໂດຍສະເພາະພວກທີ່ມີລະດັບການສຶກສາຕ່ຳ. ພາຍຫລັງການບັນຍາຍ ແຕ່ລະຄັ້ງ (ປີ ໑໙໓໔, ຄະນະນຳສະຖາບັນຄົ້ນຄວ້າບັນຫາຊົນຊາດ ແລະ ເມືອງຂຶ້ນໄດ້ສະເໜີໃຫ້ສະຫາຍ ລີມົບ ເປັນຜູ້ສອນປະຫວັດສາດຂອງພັກ ແລະ ພື້ນຖານວຽກງານຈັດຕັ້ງພັກໃຫ້ແກ່ກຸ່ມນັກຮຽນຫວຽດນາມ–ຜູ້ຂຽນ), ກ່ອນອື່ນໝົດ ຫງວຽນອາຍກວັກຊອກຮູ້ເບິ່ງວ່າອ້າຍນ້ອງກຳແໜ້ນຄວາມໝາຍ ແລະ ເປົ້າໝາຍບົດສອນໄດ້ຢ່າງຖືກຕ້ອງຫລືບໍ່, ຕໍ່ມາຈຶ່ງຕິດຕາມເບິ່ງວ່າ ຄວາມຮູ້ທີ່ໄດ້ຮຽນມາມັນຕິດພັນກັບພາກຕົວຈິງ, ກັບການຕໍ່ສູ້ປະຕິວັດຫລືບໍ່, ອັນສຸດທ້າຍຄືພວກເຂົາໄດ້ເຂົ້າໃຈສັບວິຊາສະເພາະອັນສັບສົນແລ້ວຫລືຍັງ?

ສະຫາຍຫງວຽນແຂງຕອນ ຫວນຄືນວ່າ ເຖິງວ່າ ລີມົບ ໄດ້ໄປປົວໂຕ ຢູ່ເຮືອນພັກຜ່ອນແລ້ວກໍຕາມ, ແຕ່ເພິ່ນກໍຍັງຈ່ອຍຜອມ ແລະ ຍັງມີອາການອ່ອນເພຍຢູ່. ມີສິ່ງແປກຢູ່ບ່ອນວ່າ ຄືບໍ່ເຄີຍເຫັນເພິ່ນເຈັບໂຊໜັກຈັກເທື່ອ, ເຖິງແມ່ນວ່າສຳລັບຄົນຫວຽດນາມ ເປັນການຍາກທີ່ສຸດທີ່ຈະຊິນເຄີຍກັບລະດູໜາວຢູ່ລັດເຊຍ. ເພິ່ນສະແດງໃຫ້ເຫັນວ່າມີສຸຂະພາບດີ, ດຳເນີນຊີວິດສະໝ່ຳສະເໝີ, ການນອນການຕື່ນແຕ່ລະວັນເຄັ່ງຄັດທີ່ສຸດ. ເພິ່ນຫັດກາຍຍະບໍລິຫານເປັນປະຈຳ, ຢູ່ຫ້ອງນອນເພິ່ນຍາມໃດກໍມີລູກຕຸ້ມຍົກນ້ຳໜັກ ແລະ ເຫລັກປືດການແຂນ.

໒

ນັບຕັ້ງແຕ່ຕົ້ນປີ ໑໙໓໕ ວຽກງານຂອງກົມກອງ ແລະ ສຳນັກງານທັງໝົດຂອງສາກົນກອມມູນິດທີ່ມົດສະກູ ລ້ວນແຕ່ດຳເນີນໄປພາຍໃຕ້ການກະກຽມກອງປະຊຸມໃຫຍ່ສາກົນກອມມູນິດຄັ້ງທີ 7. ບັນດານັກກອມມູນິດຫວຽດນາມ ໄດ້ຄອງຄອຍວັນເປີດ ກອງປະຊຸມໃຫຍ່ດ້ວຍຈິດໃຈເລົ່າຮ້ອນ ເພາະວ່ານີ້ແມ່ນກອງປະຊຸມໃຫຍ່ຄັ້ງທຳອິດ ຫລັງຈາກການສ້າງຕັ້ງພັກກອມມູນິດອິນດູຈີນ. ຕໍ່ຈາກນັ້ນມາບໍ່ດົນ ຄະນະຜູ້ແທນທາງການຂອງພັກຈາກດິນແດນຫວຽດນາມຢູ່ແດນໄກ ກໍໄດ້ມາຮອດມົດສະກູ, ຄະນະຜູ້ແທນດັ່ງກ່າວນຳໂດຍສະຫາຍເລີ່ງຟອງ. ໃນຄະນະຍັງມີສອງສະຫາຍ, ຜູ້ໜຶ່ງແມ່ນນາງ ມິງຄາຍ ຜູ້ໜຸ່ມນ້ອຍທີ່ມີຜິວໜັງດຳແດງຄືຜິວໜັງຊາວນາທີ່ຕາກແດດຫຼາກວັນ, ມີຄູ່ຕາມົນເບິ່ງຄືວ່າຍາມໃດກໍ່ມີນກວ້າງ ຍ້ອມວ່າມີຄວາມເບີກບານມ່ວນຊື່ນຢ່າງແປກປະຫລາດ. ສ່ວນອີກຄົນໜຶ່ງແມ່ນ ຮວາງວັນນອນ ຊາຍໜຸ່ມທີ່ມີໜ້ອຍຄົນຮູ້ຈັກ ເຊິ່ງເປັນຕົວແທນໃຫ້ແກ່ແຂວງກາວບັງ ທີ່ເປັນແຂວງເໜືອສຸດຂອງຫວຽດນາມ ນັບແຕ່ມື້ທີ່ສ້າງຕັ້ງພັກກອມມູນິດ ອິນດູຈີນຂຶ້ນມາ ຢູ່ແຂວງນີ້ມີອົງຄະນະພັກເຂັ້ມແຂງສົມຄວນ ແລະ ມີທີ່ໝັ້ນຢູ່ໃນເຂດຊົນນະບົດ.

ພວກເຂົາໄດ້ຕັດສິນໃຈວ່າ ສະມາຊິກຂອງຄະນະຜູ້ແທນແຕ່ລະຄົນ ຕ້ອງອ່ານບົດລາຍງານບົດໜຶ່ງ ຫລື ບົດປະກອບຄຳເຫັນ ຕໍ່ກອງປະຊຸມໃຫຍ່. ຄະນະຜູ້ແທນ ຫວຽດນາມ ແລະ ຫົວຈັກຫລັກແຫລ່ງຢູ່ມົດສະກູເຊິ່ງແມ່ນສະຫາຍ ລີ້ນົບເປັນຜູ້ນຳ ໄດ້ພ້ອມກັນແຕ່ງບົດປະກອບຄຳເຫັນ. ເລີ່ງຟອງ ຈະຕ້ອງອ່ານບົດລາຍງານອັນພົ້ນຖານທີ່ພາດຫົວເລື່ອງວ່າ "ການຕໍ່ສູ້ຂອງພັກກອມມູນິດອິນດູຈີນ ແລະ ຂະບວນການສະພາໂຊວຽດ ເວຕິງ", ຮວາງວັນນອນ ຈະສະເໜີບົດປະກອບຄຳເຫັນທີ່ພາດຫົວຂໍ້ວ່າ: "ການຕໍ່ສູ້ປະຕິວັດຂອງປະຊາຊົນອິນດູຈີນ ແລະ ບັນຫາການສ້າງຕັ້ງແນວໂຮມປະຊາທິປະໄຕ". ມິງຄາຍ ໃນຖານະເປັນຜູ້ແທນອາຍຸນ້ອຍທີ່ສຸດ ແລະ ທັງເປັນໜຶ່ງ ໃນຈຳນວນໜ້ອຍຂອງຜູ້ແທນເພດຍິງແຕ່ງທະວີບອາຊີ ທີ່ຖືກຄະນະນຳພາສາກົນກອມມູນິດ ເຊີນໃຫ້ກ່າວຄຳປາໄສໃນນາມເປັນຜູ້ຕາງໜ້າເພດຍິງ ຈາກບັນດາປະເທດຕາເວັນອອກ.

ກອງປະຊຸມໃຫຍ່ສາກົນກອມມູນິດຄັ້ງທີ 7 ໄດ້ເປີດຂຶ້ນໃນວັນທີ ໒໕ ເດືອນກໍລະກົດປີ ໑໙໓໕ ຢູ່ທີ່ຫໍປະຊຸມໃຫຍ່ກຳມະບານ. ເຖິງແມ່ນວ່າ ລີ້ນົບ ບໍ່ໄດ້ເຂົ້າຢູ່ໃນຄະນະຜູ້ແທນຂອງຫວຽດນາມຢ່າງເປັນທາງການກໍຕາມ ແຕ່ໃນຖານະເປັນພະນັກງານຂອງຄະ

ມະເລຂາພາກຕາເວັນອອກທີ່ຂື້ນກັບຄະນະບໍລິຫານງານສາກົນກອມມູນິດນັ້ນ ລີນົບ ໄດ້ເຂົ້າຮ່ວມທຸກໆວາລະປະຊຸມ ຂອງກອງປະຊຸມໃຫຍ່. ຢູ່ທີ່ກອງປະຊຸມນັ້ນ ລີນົບ ໄດ້ພົບພໍ້ ກັບຄົນທີ່ລື້ງເຄີຍຈຳນວນໜຶ່ງເຊັ່ນ: ມ.ກະຣຸບສະກາຢາ, ດ.ມານູອິນສະກີ, ອ.ປຽດຍິດສະດີ, ມ.ກາແຊັງ, ວ.ໂກລາຣົບ, ຊ.ໂນຊາກາ (ໂອກາໂນ), ທັງໄດ້ຮູ້ຈັກກັບບັນດານັກເຄື່ອນໄຫວ ທີ່ມີຊື່ສຽງ ຂອງຂະບວນການກອມມູນິດສາກົນ ເຊັ່ນ ຊ.ດີມີຕະຣົບ, ກ.ກົດວານ, ເບລາ ກຸນ, ວ.ປິກ, ປ.ໂຕລີອາດຕີ,ມ.ໂຕເຣ ແລະ ຄົນອື່ນໆອີກ.

ມະຕິ ແລະ ບົດສະຫລຸບ ຂອງກອງປະຊຸມໃຫຍ່ ມີຄວາມໝາຍອັນລ້ຳຄ່າ ສຳລັບການປະຕິວັດ ຫວຽດນາມ. ດັ່ງທີ່ທຸກຄົນຮູ້ກັນແລ້ວວ່າ ກອງປະຊຸມໃຫຍ່ ໄດ້ໃຫ້ລັກສະນະອັນຄົບຖ້ວນ ກ່ຽວກັບລັດທິ ຟາດຊິດ ວ່າເປັນລະບອບຜະເດັດການປາບປາມຢ່າງເປີດແປນ ຂອງພາກສ່ວນທີ່ປະຕິການທີ່ສຸດ ໂຊແວັງທີ່ສຸດ ຈັກກະພັດທີ່ສຸດ ຂອງນາຍທຶນຜູກຂາດ; ກອງປະຊຸມໃຫຍ່ ຍັງໄດ້ກຳນົດໜ້າທີ່ ຂອງຂະບວນການກອມມູນິດ ແລະກຳມະກອນສາກົນ ຂຶ້ນຢູ່ຕໍ່ໜ້າໄພອັນຕະລາຍ ຈາກພວກຟາດຊິດ ທີ່ນັບວັນນັບເພີ່ມຂຶ້ນ . ເຖິງແມ່ນວ່າ ໜ້າທີ່ດັ່ງກ່າວ ກ່ອນອື່ນໝົດ ພົວພັນເຖິງພັກກອມມູນິດເອີລົບ ກໍຕາມ ບົດສະຫລຸບ ຂອງກອງປະຊຸມໃຫຍ່ ທີ່ເວົ້າເຖິງ ໄພອັນຕະລາຍ ຟາດຊິດ ກໍໄດ້ຊ່ວຍໃຫ້ນັກກອມມູນິດ ຫວຽດນາມ ໄດ້ວາງ ແລະ ປະຕິບັດຫລັກໝັ້ນ ທີ່ມີລັກສະນະຫລັກການຢ່າງຂາດຂັ້ນ ໃນຕໍ່ໆມາ ກ່ຽວກັບພວກຊຸນເສິກ ຍີ່ປຸ່ນ ເຊິ່ງນັບຕັ້ງແຕ່ສະໄໝນັ້ນ ໄດ້ແຜ່ຂະຫຍາຍ ການຮຸກຮານ ລົງສູ່ພາກໃຕ້ ຈີນ ແລະ ກາຍເປັນສັດຕູ ຕົວອັນຕະລາຍ ຂອງການປະຕິວັດຫວຽດນາມ.

ຫລັກມູນກ່ຽວກັບນະໂຍບາຍແນວໂຮມ ຂອງປະຊາຊົນ ຕ້ານຈັກກະພັດ ຢູ່ປະເທດເມືອງຂຶ້ນ ແລະ ປະເທດບໍ່ມີເອກະລາດ ທີ່ໄດ້ຍົກຂຶ້ນໃນບົດລາຍງານຂອງ ເຊອອກຊີ ດີມີຕະຣົບ ແລະ ທີ່ບັນຈຸຢູ່ໃນມະຕິຂອງກອງປະຊຸມໃຫຍ່ ມີບົດບາດ ສຳຄັນເປັນພິເສດ, ອາດຈະເວົ້າໄດ້ວ່າ ມີບົດບາດສຳຄັນຕະຫລອດໄປ ສຳລັບການເຄື່ອນໄຫວ ຢ່າງມີຜົນ ຂອງພັກກອມມູນິດ ອິນດູຈີນ ໃນພາຍລຸນມາ. ກອງປະຊຸມໃຫຍ່ ຄັ້ງທີ 7 ໄດ້ຟື້ນຊີບ ແລະ ເສີມຂະຫຍາຍຂໍ້ວິນິດໄສ ກ່ຽວກັບແນວໂຮມ ເອກະພາບຕ້ານຈັກກະພັດ ຢູ່ປະເທດເມືອງຂຶ້ນ ແລະ ປະເທດບໍ່ມີເອກະລາດ ໃນຖານະ ທີ່ມັນເປັນຮູບການເຕົ້າໂຮມຂອງບັນດາກຳລັງປົດປ່ອຍຊາດທັງໝົດ, ຂໍ້ວິນິດໄສ ດັ່ງ

ກ່າວນັ້ນ ໄດ້ຖືກຮ່າງຂຶ້ນ ໂດຍຢູ່ພາຍໃຕ້ການເຂົ້າຮ່ວມ ຂອງ ວ.ອີ.ເລນິນ ແລະ ໄດ້ຖືກບັນຈຸໄວ້ ຢູ່ໃນມະຕິຂອງກອງປະຊຸມໃຫຍ່ຄັ້ງທີ 4.

ສຳລັບຫງວຽນອາຍກວັກ ແລະ ເພື່ອນຮ່ວມຮົບຂອງເພິ່ນ ສິ່ງສຳຄັນກໍແມ່ນ ຢູ່ບ່ອນວ່າ ກອງປະຊຸມໃຫຍ່ຄັ້ງທີ 7 ໄດ້ປະຕິເສດຂໍ້ກຳນົດອຽງຊ້າຍທີ່ມີມາກ່ອນ ກ່ຽວກັບຄວາມຈຳເປັນຕ້ອງປະຕິບັດ "ການປະຕິວັດກຳມະກອນ-ຊາວນາ", ສ້າງຕັ້ງ "ລັດຖະບານໂຊວຽດ" ຢູ່ປະເທດເມືອງຂຶ້ນ ແລະ ປະເທດບໍ່ມີເອກະລາດ, ດ້ວຍເຫດວ່າການກະທຳດັ່ງກ່າວບໍ່ແທດເໝາະກັບສະພາບການຂອງປະເທດສ່ວນໃຫຍ່ ແລະ ໝາຍເຖິງການຖືເບົາໜ້າທີ່ຕ້ານຈັກກະພັດທົ່ວປະເທດ. ກອງປະຊຸມໃຫຍ່ຊີ້ໃຫ້ເຫັນວ່າ ສຳລັບປະເທດເມືອງຂຶ້ນ ແລະ ປະເທດເຄິ່ງເມືອງຂຶ້ນສ່ວນຫລາຍ ບາດກ້າວເດີນອັນທຳອິດຂອງການປະຕິວັດຊາດອັນແທ້ຈິງ ຕ້ອງເປັນໄລຍະແຫ່ງການຕໍ່ສູ້ເພື່ອປົດປ່ອຍຊາດ ຢ່າງຫລີກລ່ຽງບໍ່ໄດ້ ທີ່ສຸມປາຍຫອກໃສ່ພວກຈັກກະພັດຜູ້ກົດຂີ່. ຖ້າວ່າເລື່ອນພາລະກິດ ປົດປ່ອຍຊາດ ຈົນໄປຮອດເວລາທີ່ທຸກໆເງື່ອນໄຂ ເພື່ອໃຫ້ອຳນາດປົກຄອງກຳມະກອນ-ຊາວນາຍາດໄດ້ໄຊຊະນະເຖິງຂັ້ນສຸກງອມແລ້ວ ກໍ່ແມ່ນຄວາມຜິດພາດຢ່າງອະໄພໃຫ້ບໍ່ໄດ້.ຕ້ອງຊອກຫາວິທີທາງສ້າງຕັ້ງແນວໂຮມເອກະພາບແຫ່ງປະຊາຊົນ ດ້ານໜຶ່ງໂດຍດຶງດູດເອົາມະຫາຊົນຈຳນວນຫລວງຫລາຍເຂົ້າຮ່ວມໃນການຕໍ່ສູ້ຕ້ານການກົດຂີ່ຂອງລັດທິ ຈັກກະພັດຊຶ່ງນັບວັນນັບເພີ່ມຂຶ້ນ ຕ້ານແອກຂ້າທາດອັນໂຫດຮ້າຍຂອງພວກເຂົາ ເພື່ອຂັບໄລ່ ພວກຈັກກະພັດນິຍົມ ແລະ ຍາດເອົາເອກະລາດແຫ່ງຊາດ, ດ້ານໜຶ່ງອີກ ໂດຍມີການເຂົ້າຮ່ວມຢ່າງຕັ້ງໜ້າໃນຂະບວນການມະຫາຊົນທີ່ຕ້ານຈັກກະພັດ ຊຶ່ງມີນັກປະຕິວັດຊາດນິຍົມ ແລະ ນັກປະຕິຮູບຊາດນິຍົມເປັນຜູ້ນຳພາ.

ຢູ່ຫວຽດນາມ ທັງບໍ່ມີຂະບວນການມະຫາຊົນ ຊຶ່ງແມ່ນພາກສ່ວນ ຊາດນິຍົມເປັນຜູ້ນຳພາ ທັງບໍ່ມີກຳລັງອັນໃດເລີຍທີ່ເອົາຈິງເອົາຈັງ ທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນ ນາຍທຶນແຫ່ງຊາດອີກດ້ວຍ. ພັກຕ່າງໆຂອງພວກນາຍທຶນ ແລະ ຂອງພວກນາຍທຶນນ້ອຍ ທີ່ມີຢູ່ນັ້ນຍັງອ່ອນແອໂພດດ້ານການເມືອງ ແລະ ການຈັດຕັ້ງ, ສະນັ້ນຈຶ່ງບໍ່ສາມາດ ວາງໂຄງການການເມືອງລະດັບທົ່ວປະເທດ ແລະ ດຶງດູດເອົາມະຫາຊົນມາຢູ່ນຳຝ່າຍຕົນ . ດ້ວຍເຫດນັ້ນ ບັນດານັກກອມມູນິດຫວຽດນາມ ຈຶ່ງບໍ່ໄດ້ພົບກັບບັນຫາທີ່ວ່າ ຄວນຈະເຂົ້າຮ່ວມຂະບວນການນັ້ນຫລືຂະບວນການນີ້ ຫລືບໍ່, ຕາມທຳມະດາແລ້ວ ມັນແມ່ນບັນຫາ ທີ່ເປັນສາຍເຫດໃຫ້ເກີດມີການພິຈາລະນາຖົກຖຽງກັນຢ່າງເຜັດຮ້ອນພາຍໃນພັກຢູ່ເລື້ອຍໆ.

ຖ້າເວົ້າອີກຢ່າງໜຶ່ງ ຕໍ່ໜ້າພວກເຂົາເຈົ້າແມ່ນດິນເຮືອທີ່ບໍ່ມີໃຜບຸກເບີກຈັກເທື່ອ, ນັ້ນແມ່ນດິນເຮືອທີ່ພວກເຂົາເຈົ້າບໍ່ພຽງແຕ່ສາມາດບຸກເບີກໄດ້ເທົ່ານັ້ນ ແຕ່ຫາກຍັງຕ້ອງບຸກເບີກນຳອີກ, ເພື່ອບັນລຸເຖິງຈຸດປະສົງດັ່ງກ່າວນັ້ນ ພວກເຂົາເຈົ້າຕ້ອງຍົກຄຳຂວັນ ລະດັບທົ່ວຊາດ ແລະ ມີລັກສະນະປະຊາທິປະໄຕລວມທົ່ວໄປ; ຕ້ອງຊອກຮູບການໜຶ່ງ ທີ່ອາດໃຊ້ໄດ້ຂອງແນວໂຮມເອກະພາບ; ຕ້ອງຕັ້ງໜ້າດຶງດູດເອົາປະຊາຊົນທຸກຊຸ່ມຊົນທີ່ຕຽມພ້ອມຕ້ານກັບພວກລ່າເມືອງຂຶ້ນ ລວມທັງຊົນຊັ້ນນາຍທຶນແຫ່ງຊາດ ຊຶ່ງສ່ວນໃຫຍ່ເຊັ່ນດຽວກັບຊົນຊາດທັງໝົດ ຕ່າງກໍ່ຕົກທຸກທໍລະມານ ຍ້ອນແອກກົດຂີ່ ຂອງພວກຈັກກະພັດເຂົ້າຢູ່ໃນແນວໂຮມດັ່ງກ່າວ

ເບິ່ງຕາມທັດສະນະທີ່ມີຢູ່ໃນປະຈຸບັນ ເມື່ອພວກເຮົາລ້ວນແຕ່ຮູ້ຈັກຄວາມຈິງທີ່ວ່າການປະຕິວັດປົດປ່ອຍຊາດຢູ່ຫວຽດນາມ ແລະ ຢູ່ປະເທດອື່ນໆຈຳນວນຫລວງຫລາຍທີ່ໄດ້ຮັບໄຊຊະນະເປັນຄືແນວໃດ ແລະ ເປັນຍ້ອນຫຍັງ ທຸກສິ່ງທຸກຢ່າງ ທີ່ໄດ້ເວົ້າຂ້າງເທິງນີ້ ອາດຈະເປັນສັດຈະທຳທີ່ງ່າຍດາຍ, ເຖິງແມ່ນວ່າຢູ່ໃນຫລາຍປະເທດ ຈົນຮອດປະຈຸບັນ ບັນຫາວ່າດ້ວຍແນວໂຮມເອກະພາບແຫ່ງຊາດ ກໍຍັງເປັນບັນຫາອັນຮີບດ່ວນ . ສຳລັບບັນດານັກກອມມູນິດຫວຽດນາມ ຫລັກມູນອັນເປັນພື້ນຖານຂອງກອງປະຊຸມໃຫຍ່ສາກົນກອມມູນິດຄັ້ງທີ 7 ກ່ຽວກັບຍຸດໂທບາຍຂອງແນວໂຮມເອກະພາບແຫ່ງຊາດຢູ່ປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ ໄດ້ກາຍເປັນດວງດາວເຍືອງທາງໃຫ້ແກ່ການເຄື່ອນໄຫວຕໍ່ໆມາຂອງພວກເຂົາເຈົ້າ ແລະ ພວກເຂົາເຈົ້າກໍ່ໄດ້ຫອນລືມຫລັກມູນດັ່ງກ່າວຫຼາຍເທື່ອຢູ່ບັນດາກອງປະຊຸມໃຫຍ່ພັກ ແລະ ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານ–ສູນກາງພັກຂອງຕົນ. ແມ່ນກະໂຕຍຸດໂທບາຍຂອງແນວໂຮມເອກະພາບແຫ່ງຊາດເອງທີ່ຖືກປະຕິບັດຢ່າງມີໄຫວພິບ ແລະ ມີຫົວຄິດປະດິດສ້າງ ໂດຍຄຳນຶງເຖິງລະດັບ ແຫ່ງຄວາມສຸກງອມຂອງຂະບວນການປົດປ່ອຍຊາດ ແລະ ໜ້າທີ່ລະອຽດທີ່ຕັ້ງຂຶ້ນຕໍ່ໜ້າ ຂະບວນການດັ່ງກ່າວ ກາຍເປັນໜຶ່ງໃນຈຳນວນປັດໄຈອັນຕັດສິນຊີ້ຂາດແຫ່ງໄຊຊະນະຂອງປະຊາຊົນຫວຽດນາມ ໃນເດືອນສິງຫາ ປີ ໑໙໔໕ ແລ້ວຕໍ່ມາໃນສົງຄາມຕໍ່ຕ້ານສອງໄລຍະ ຄືຕ້ານພວກລ່າເມືອງຂຶ້ນຝະລັ່ງ ແລະ ຕ້ານພວກອາເມລິກາຜູ້ຮຸກຮານ.

ສຳລັບຜູ້ແທນຫວຽດນາມ ກອງປະຊຸມໃຫຍ່ຄັ້ງທີ 7 ຂອງສາກົນກອມມູນິດ ໄດ້ກາຍເປັນການສະແດງຢ່າງຈະແຈ້ງໃຫ້ເຫັນເຖິງການຮັບຮູ້ພັກກອມມູນິດອິນດູຈີນ ທີ່ຫາກໍ່ສ້າງຕັ້ງໃໝ່ຈາກຝ່າຍສາກົນ. ບົດປາໄສຂອງຜູ້ແທນຫວຽດນາມໄດ້ຖືກບັນດາ ເພື່ອນ

ຮ່ວມຮົບຕ່າງປະເທດເອົາໃຈໃສ່ຕິດຕາມຫລາຍທີ່ສຸດ. ເມື່ອສະຫາຍຍິງ ນິງຄາຍ ຜູ້ໜຸ່ມນ້ອຍກ່າວຄຳປາໄສອັນໜ້າດູດດື່ມຈົບລົງ ໂດຍເລົ່າກ່ຽວກັບເລື່ອງ ຂອງແມ່ຍິງຫວຽດນາມ ທີ່ມີຄວາມຫວາດຫວັ່ນ ແລະ ເປັນອາຫາດ ແຕ່ກໍໄດ້ຕື່ນຕົວໄວ ແລະ ຢືນຢູ່ໃນຖັນແຖວປະຕິວັດ ເປັນຄືແນວໃດນັ້ນ ກໍມີຜູ້ແທນເພດຍິງຈຳນວນໜຶ່ງລຸກຢືນຂຶ້ນ ແລະ ສວມກອດນາງຢ່າງດູດດື່ມທ່າມກາງສຽງຕົບມືດັງກ້ອງ. ນ.ກະຣຸບສະກາຢາ ໄດ້ອວຍພອນນາງດ້ວຍຄວາມຈິງໃຈໃນເວລາຢຸດພັກ. ພາຍໃນໜຶ່ງເດືອນທີ່ກອງປະຊຸມໃຫຍ່ປະຕິບັດວຽກງານ ຜູ້ແທນຫວຽດນາມໄດ້ເປັນແຂກຜູ້ມີກຽດຂອງກຳມະການ ແລະ ນັກຮົບ ກອງທັບແດງທີ່ມົດສະກູ, ໄດ້ພົບພໍ້ກັບຄະນະຜູ້ແທນພັກກອມມູນິດຂອງຫລາຍປະເທດ.

ສຸດທ້າຍ ເຫດການອັນເບີກບານມ່ວນຊື່ນທີ່ສຸດສຳລັບນັກກອມມູນິດ ຫວຽດນາມກໍເກີດຂຶ້ນ ໃນວາລະປິດກອງປະຊຸມໃຫຍ່. ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຮອງເອົາມະຕິຕົກລົງ ກ່ຽວກັບການຮັບເອົາພັກກອມມູນິດອິນດູຈີນເຂົ້າເປັນສະມາຊິກຂອງສາກົນກອມມູນິດ. ຊຶ່ງຄະນະບໍລິຫານງານສາກົນກອມມູນິດໄດ້ຮັບເອົາແລ້ວ ແຕ່ປີ ໑໙໓໑ ພຸ້ນ. ສະຫາຍ ເລຮົ່ງຟອງ ຜູ້ຕາງໜ້າພັກກອມມູນິດອິນດູຈີນຖືກເລືອກຕັ້ງເປັນກຳມະການສຳຮອງໃນຄະນະບໍລິຫານງານສາກົນກອມມູນິດ; ຈາກນັ້ນມາ ຂະບວນການກອມມູນິດອິນດູຈີນທີ່ນັບມື້ນັບເຕີບໃຫຍ່ເຂັ້ມແຂງ ຈຶ່ງໄດ້ມີຜູ້ຕາງໜ້າຢູ່ອົງການຊີ້ນຳຂອງອົງການຈັດຕັ້ງສາກົນຂອງຊາວກອມມູນິດ.

ໂດຍໄດ້ຮັບມອບໝາຍໜ້າທີ່ຈາກຄະນະບໍລິຫານງານສາກົນກອມມູນິດ ເລຮົ່ງຟອງ ໄດ້ກຳແໜ້ນຈິດໃຈຂອງມະຕິຕ່າງໆຂອງກອງປະຊຸມໃຫຍ່ຄັ້ງທີ 7 ກັບໄປ ຫວຽດນາມ ເພື່ອເລີ່ມກະກຽມຮຽກໂຮມກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ. ສອງສາມເດືອນຕໍ່ມາ ນິງຄາຍ ແລະ ຮ່ວາງວັນນອນກໍກະກຽມອອກເດີນທາງ, ພວກເຂົາເຈົ້າຕົກລົງກັບຄືນປະເທດໂດຍຜ່ານຝະລັ່ງ ແລະ ສວມບົດບາດເປັນຄູ່ຜົວເມຍທີ່ເດີນທາງທ່ອງທ່ຽວ.

ກ່ອນຈະຈາກມົດສະກູ ພວກເຂົາເຈົ້າໄດ້ພົບ ລີນົບເພື່ອຂໍຄຳແນະນຳຕັກເຕືອນ. ພວກເຂົາທັງສາມຄົນລ້ວນແຕ່ມ່ວນຊື່ນເບີກບານ ກໍຍ້ອນວ່າຢູ່ຝະລັ່ງ ລັດຖະບານ ຂອງແນວໂຮມທີ່ມີພັກກອມມູນິດຝະລັ່ງເຂົ້າຮ່ວມ ຫາກໍຂຶ້ນກຳອຳນາດ. ພວກເຂົາ ຍັງບໍ່ຮູ້ຈັກວ່າ ເຫດການສຳຄັນດັ່ງກ່າວຈະສົ່ງຜົນສະທ້ອນເຖິງສະພາບການຂອງອິນດູຈີນ ຢູ່ໃນລະດັບໃດ ແຕ່ພວກເຂົາກໍເຊື່ອວ່າ ຄວາມອາດສາມາດໃໝ່ທີ່ອຳນວຍທີ່ສຸດ ສຳລັບ ການ

ເຄື່ອນໄຫວຂອງພັກໄດ້ໄຂອອກແລ້ວ.

ຫງວຽນອາຍກວັກ ເວົ້າວ່າ: "ໄຊຊະນະຂອງແນວໂຮມປະຊາຊົນ ຢູ່ທີ່ ຝະລັ່ງ ນັ້ນ ເປັນໂອກາດທີ່ຫາຍາກສຳລັບພວກເຮົາ ດັ່ງນັ້ນ ພວກເຮົາຈະບໍ່ປະປ່ອຍກາລະໂອກາດນີ້ໃຫ້ຫລຸດໄປຢ່າງເດັດຂາດ. ສິ່ງສຳຄັນໃນປະຈຸບັນ ຕ້ອງຮັບປະກັນຄວາມເປັນເອກະພາບອັນໜັກແໜ້ນພາຍໃນພັກ, ໂດຍສະເພາະຢ່າງຍິ່ງແມ່ນລະຫວ່າງ ພາກສ່ວນພາຍໃນ ແລະ ຕ່າງປະເທດ. ເມື່ອກັບໄປຮອດໄຊງ່ອນຂໍໃຫ້ບອກສະຫາຍ ຢຸຍ (ເລຮົ່ງຟອງ) ຮູ້ກ່ຽວກັບຄຳເຫັນສາມປະການດັ່ງນີ້:

ປະການທີໜຶ່ງ, ເນື່ອງຈາກ ໄຊຊະນະຂອງແນວໂຮມປະຊາຊົນ ຢູ່ທີ່ຝະລັ່ງສະຖານະການຢູ່ໃນອິນດູຈີນ ແນ່ນອນວ່າ ຈະຕ້ອງປ່ຽນແປງໄປໃນທາງທີ່ດີ. ດ້ວຍເຫດ ນີ້ຄະນະບໍລິຫານງານສູນກາງພັກ ຢູ່ນອກປະເທດ ຈຶ່ງຕ້ອງຮີບຮ້ອນກັບຄືນປະເທດ ຫວຽດນາມ ແລະ ແບກຫາບໜ້າທີ່ເປັນຜູ້ນຳພາຂະບວນການຮັກຊາດໂດຍກົງ, ໂດຍປະພາກສ່ວນໜຶ່ງນ້ອຍໆໄວ້ຢູ່ຕ່າງປະເທດ ເພື່ອຕິດຕໍ່ກັບໂລກພາຍນອກ.

ປະການທີສອງ, ຢູ່ຫູກາຫີນຫູກແຫງ, ຢູ່ຫວຽດນາມ ເຊັ່ນດຽວກັນ ພວກນິຍົມຕະຣົດຊະກີ ລ້ວນແຕ່ສະແດງໃຫ້ເຫັນທາດແທ້ປະຕິການຂອງເຂົາ. ພັກເຮົາຕ້ອງເດັດດ່ຽວຕັດຂາດຢ່າງສິ້ນເຊີງ ແລະ ບໍ່ປະນີປະນອມກັບພວກເຂົາແຕ່ຢ່າງໃດ.

ປະການທີສາມ, ຕ້ອງຊອກຫາວິທີທາງສ້າງຕັ້ງແນວໂຮມປະຊາທິປະໄຕ ຕ້ານຟາດຊິດ, ຕ້ານສົງຄາມໃຫ້ໄດ້ ໂດຍດຶງດູດເອົາກຳລັງຮັກຊາດເຂົ້າຮ່ວມ ໃນແນວໂຮມດັ່ງກ່າວໃຫ້ໄດ້ຢ່າງຫລວງຫລາຍ, ນັບທັງບຸກຄົນທີ່ມີຄວາມສາມາດດຳເນີນການຕໍ່ສູ້ ກູ້ຊາດ ແລະ ກູ້ປະຊາຊົນ. ຄຽງຄູ່ກັນນັ້ນ ຄວນຈື່ຈຳໄວ້ວ່າ ເມື່ອຮ່ວມສຳພັນ ກັບກຳລັງອື່ນໆ ຊຶ່ງບໍ່ວ່າໃນກໍລະນີໃດກໍຕາມ ຝ່າຍພວກເຮົາຕ້ອງບໍ່ປະລະສິດຜົນປະໂຫຍດ ອັນເປັນຕາຍຂອງພັກ ແລະ ຂອງຊົນຊັ້ນກຳມະກອນ".

ເວລາໄປສົ່ງ ນົງຄາຍ ແລະ ຮວາງວັນນອນ ຢູ່ສະຖານີລົດໄຟ ຫງວຽນອາຍກວັກ ກັບຄືນໄປເວົ້າເລື່ອງທີ່ໄດ້ສົນທະນາກັນແລ້ວວ່າ:

"ພວກສະຫາຍ ເຂົ້າໃຈໝົດທຸກຢ່າງ ທີ່ຂ້າພະເຈົ້າເວົ້າແລ້ວບໍ ? ຈົ່ງພະຍາຍາມຈົດຈຳທັງໝົດ ແລະ ເລົ່າສູ່ສະຫາຍ ຢຸຍ ຟັງ. ຂ້າພະເຈົ້າຂໍເນັ້ນຄືນ ອີກເທື່ອໜຶ່ງວ່າ: ເດັດຂາດບໍ່ປະນີປະນອມກັບພວກນິຍົມຕະຣົດຊະກີບໍ່ວ່າໃນບັນຫາໃດກໍຕາມ."

ໃນເດືອນກໍລະກົດປີ ໑໙໓໖ ໂດຍສວມບົດບາດເປັນນັກທຸລະກິດຜູ້ຮັ່ງມີ ເລຮົ່ງ

ຟອງ ອອກຈາກຄຸກຊຽງໄຮ້ໄປຮອດໄຊງ່ອນ ແລ້ວຈາກນັ້ນເພິ່ນພ້ອມກັບ ຮ່າຮຸຍເຕີນ ກຳມະການສູນກາງພັກກອມມູນິດອິນດູຈີນ ທີ່ຮຽນຮ່ວມກັນຢູ່ມະຫາວິທະຍາໄລກອມມູນິດ ສຳລັບຊາວຜູ້ອອກແຮງງານຂອງພາກຕາເວັນອອກ, ໄດ້ຮຽກໂຮມກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ເພື່ອດັດແປງມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີໜຶ່ງຂອງພັກ ໃຫ້ແທດເໝາະກັບມະຕິຂອງກອງປະຊຸມສາກົນກອມມູນິດ ຄັ້ງທີ 7. ກອງປະຊຸມໄດ້ຊີ້ບອກໜ້າທີ່ຂອງການປະຕິວັດອິນດູຈີນສຳລັບໄລຍະໃໝ່ຄື: ເຂົ້າຮ່ວມໃນຖັນແຖວຂອງແນວໂຮມແຫ່ງການຕໍ່ສູ້ຂອງທົ່ວໂລກ ເພື່ອປະຊາທິປະໄຕ ແລະສັນຕິພາບ, ຕ້ານລັດທິຟາດຊິດ ແລະ ສົງຄາມ ໂດຍແມ່ນສະຫະພາບໂຊວຽດເປັນຜູ້ນຳໜ້າ. ກອງປະຊຸມຍັງໄດ້ຜ່ານແຜນນະໂຍບາຍສ້າງຕັ້ງແນວໂຮມແຫ່ງຊາດຕ້ານຈັກກະພັດ ເຊິ່ງພາຍລູນມາໃສ່ຊື່ວ່າ ແນວໂຮມປະຊາທິປະໄຕອິນດູຈີນ.

ຂະບວນການເພື່ອການສ້າງຕັ້ງແນວໂຮມປະຊາທິປະໄຕ ໄດ້ຂະຫຍາຍຕົວ ໄປເຖິງບ່ອນພຸ່ງຂຶ້ນທີ່ມີລັກສະນະຊາດປະຊາທິປະໄຕ ແລະ ປະຕິວັດຢ່າງບໍ່ເຄີຍມີມາ ກ່ອນຈັກເທື່ອ. ຢູ່ທົ່ວທຸກຫົນແຫ່ງໄດ້ມີການສ້າງຕັ້ງຄະນະກຳມະການເພື່ອຮຽກໂຮມກອງປະຊຸມໃຫຍ່ຂອງປະຊາຊົນອິນດູຈີນ, ມີການໂຮມຊຸມນຸມເຊິ່ງໃນນັ້ນໄດ້ສະເໜີຄຳຮຽກຮ້ອງຂອງປະຊາຊົນຕໍ່ລັດຖະບານແນວໂຮມປະຊາຊົນຂອງ ຝະລັ່ງ ເພື່ອຂໍໃຫ້ທຳການປະຕິຮູບປະຊາທິປະໄຕຢູ່ທີ່ຫວຽດນາມ ແລະ ປົວແປງຊີວິດການເປັນຢູ່ຂອງປະຊາຊົນ. ໃນທ້າຍປີ ໑໙໓໖ ເມື່ອຄະນະກຳມະການກວດກາຂອງລັດຖະບານແນວໂຮມປະຊາຊົນ ຂອງຝະລັ່ງ ເຊິ່ງແມ່ນຊຸດສະແຕັງ ໂກດາ ເປັນຫົວໜ້າ ໄດ້ມາເຖິງໄຊງ່ອນ ເພື່ອກວດເບິ່ງສະພາບການຢູ່ອິນດູຈີນ ຢູ່ກັບທີ່, ຢູ່ສະຖານທີ່ໃດກໍຕາມ ຕາມເສັ້ນທາງແຕ່ໄຊງ່ອນ ໄປຮ່າໂນ້ຍທີ່ມີລວງຍາວກວ່າ ໑໐໐໐ ກິໂລແມັດ, ມີປະຊາຊົນຈຳນວນຫລວງຫລາຍທີ່ແຫ່ຂະບວນອອກມາຕ້ອນຮັບສະມາຊິກຂອງຄະນະ ເພື່ອມອບໜັງສືຮ້ອງທຸກເປັນຮ້ອຍໆໃບ ໃຫ້ຄະນະນີ້.

ຄື້ນແຫ່ງການນັດຢຸດງານ, ມິດຕິງ, ໂຮມຊຸມນຸມ ໃຕ້ຄຳຂວັນທີ່ວ່າ " "ເອກະລາດ, ປະຊາທິປະໄຕ, ປ່ອຍນັກໂທດການເມືອງ" ເຊິ່ງພຸ່ງຂຶ້ນຢູ່ທົ່ວປະເທດ ໄດ້ເກີດດອກອອກຜົນຫລາຍອັນ. ລະດູໃບໄມ້ຫລົ່ນແລະ ລະດູໜາວປີ ໑໙໓໖ ມີນັກໂທດ ການເມືອງເປັນຮ້ອຍຄົນ ໃນນັ້ນມີຫລາຍຄົນທີ່ເປັນຜູ້ນຳຂອງພັກຖືກປົດປ່ອຍອອກຈາກຄຸກແລະຄ້າຍກັກກັນ, ພວກເຂົາເຫລົ່ານີ້ໄດ້ເພີ່ມເຂົ້າໃສ່ຖັນແຖວນັກຮົບປະຕິວັດ ແລະ ເຮັດໃຫ້

ຄະນະນຳຂະບວນການປະຊາທິປະໄຕເຂັ້ມແຂງຂຶ້ນກວ່າເກົ່າ. ສະຫາຍ ຮ່ວາງກວັກຫວຽດ ນັກຮົບປະຕິວັດຜູ້ອາວຸໂສຂອງຫວຽດນາມ ເຊິ່ງໃນຊ່ວງໄລຍະນັ້ນ ຖືກກັກຂັງໄວ້ຢູ່ໃນຄຸກທີ່ຕັ້ງຢູ່ໃນເກາະ ປູໂລ-ໂກນດ້າວ ໄດ້ເລົ່າຄືນວ່າ:

"...ຜ່ານໜັງສືພິມຝະລັ່ງ ພວກຂ້າພະເຈົ້າຈຶ່ງຮູ້ກ່ຽວກັບໄຊຊະນະອັນສະຫງ່າງາມຂອງແນວໂຮມປະຊາຊົນຂອງຝະລັ່ງ ໃນການເລືອກຕັ້ງທົ່ວປະເທດຄັ້ງເດືອນພຶດສະພາປີ ໑໙໓໖. ບໍ່ສະເພາະແຕ່ພວກຂ້າພະເຈົ້າເທົ່ານັ້ນທີ່ຕື່ນໄປດ້ວຍຄວາມຫວັງ, ອ້າຍນ້ອງທີ່ມີນ້ຳໃຈຊາດນິຍົມອັນປອດໃສຄືກັນກັບພວກຂ້າພະເຈົ້າຕ່າງກໍຕື່ນໄປດ້ວຍ ຄວາມຫວັງເຊັ່ນກັນ. ຕໍ່ມາ ຫລັງຈາກທີ່ລັດຖະບານຝະລັ່ງຊຸດໃໝ່ຖືກສ້າງຕັ້ງຂຶ້ນແລ້ວ, ພວກຂ້າພະເຈົ້າອົດທົນຕໍ່ໄປອີກບໍ່ໄຫວ. ໃນທີ່ສຸດອ້າຍນ້ອງຈຳນວນທຳອິດທີ່ຖືກປ່ອຍຕົວກໍຫລົບໜີໄປຈາກເກາະ. ລະດູແລ້ງເບິ່ງຄ້າຍຄືວ່າຍາວນານຢ່າງບໍ່ມີຂອບເຂດ ໄດ້ຜ່ານກາຍໄປ ແລະພວກຂ້າພະເຈົ້າເກືອບວ່າໄດ້ໝົດຄວາມຫວັງແລ້ວ. ແຕ່ວ່າຕອນເຊົ້າ ມື້ໜຶ່ງທຳມະໂລງເຊີນພວກຂ້າພະເຈົ້າອອກມາ ຈາກນັ້ນກໍແນມເບິ່ງພວກຂ້າພະເຈົ້າແຕ່ຫົວຈົນສຸດຕີນ, ພິເສດແມ່ນສະຫາຍ ເລຢວນ ແລະ ຟາມວັນດົງ ແລ້ວຈຶ່ງຖາມຂຶ້ນດ້ວຍຄວາມບໍ່ພໍໃຈວ່າ:

"ພວກເຈົ້າກໍຢູ່ໃນຈຳພວກນີ້ບໍ ?"

"ບໍ່ພໍໃຈແມ່ນບໍ ? ຈື່ໄດ້ບໍ່ວ່າ ພວກເຮົາຖືກຈັບໂດຍປາສະຈາກເຫດຜົນ ແລະບໍ່ມີຫລັກຖານແມ່ນແຕ່ອັນດຽວ..."

ພາຍຫລັງຫົກປີແຫ່ງຄວາມທໍລະມານຢູ່ໃນການຕໍ່ສູ້ແບບໃຕ້ດິນ ພາຍໃຕ້ການໜີບຮັດ ແລະ ການປາບປາມອັນໂຫດຮ້າຍສາມານ, ເປັນເທື່ອທຳອິດ ທີ່ພັກກອມມູນິດອິນດູຈີນມີຄວາມສາມາດເຄື່ອນໄຫວຢ່າງເປີດເຜີຍ. ປຶ້ມອ່ານ, ໜັງສືພິມ, ເອກະສານຂອງພັກຖືກພິມຈຳໜ່າຍຢ່າງຖືກຕ້ອງຕາມກົດໝາຍ, ສິ່ງດັ່ງກ່າວໄດ້ນຳເອົາແນວຄິດ ຂອງລັດທິມາກ-ເລນິນ ມາສູ່ປະຊາຊົນ ທັງໄດ້ອະທິບາຍແຈ້ງແນວທາງ ແລະ ນະໂຍບາຍຂອງພັກກອມມູນິດອິນດູຈີນ ແລະ ສາກົນກອມມູນິດ. ກ່ອນໜ້ານີ້ໜຶ່ງຫລືສອງປີນັກກອມມູນິດຫວຽດນາມ ອາດຄິດໄດ້ບໍ່ວ່າ ຈະສາມາດຈັດພິມບໍ່ພຽງແຕ່ເອກະສານຂອງພັກກອມມູນິດອິນດູຈີນເທົ່ານັ້ນ ແຕ່ຫາກຍັງນັບທັງມະຕິຂອງກອງປະຊຸມໃຫຍ່ເທື່ອທີ 7 ກໍຄືເອກະສານສຳຄັນອື່ນໆຂອງສາກົນກອມມູນິດໄດ້ຢ່າງງ່າຍດາຍ ຢູ່ໜ້າໜັງສືພິມຂອງພັກຕົນ ທີ່ພິມຈຳໜ່າຍຢູ່ຮ່າໂນ້ຍ ແລະ ຢູ່ໄຊງ່ອນ.

ຄຳສັ່ງຂອງເຈົ້າໜ້າທີ່ຕຳຫລວດທີ່ຫ້າມບໍ່ໃຫ້ເວົ້າເຖິງດິນແດນໂຊວຽດ ກໍຖືກຍົກເລີກ. ກ່ອນໜ້ານີ້ ຜູ້ໃດລ່ວງລະເມີດຄຳສັ່ງນີ້ຈະຖືກຄູກຢ່າງທັນທີໂລດ. ເພື່ອທົດແທນເວລາທີ່ເສຍໄປນັ້ນ ກະບອກສຽງຕ່າງໆຂອງພັກກອມມູນິດອິນດູຈີນກໍ່ອອກແຮງ ເຮັດໃຫ້ບັນດາຜູ້ອ່ານຮູ້ຈັກຊີວິດການເປັນຢູ່ ແລະ ການຕໍ່ສູ້ຂອງລັດກຳມະກອນ-ຊາວນາ ລັດທຳອິດໃນໂລກ ຢ່າງຮອບດ້ານ ແລະ ຢ່າງກວ້າງຂວາງ. ໃນນີ້ກ່ອນຈະຮອດການສະເຫຼີມສະຫລອງວັນຄົບຮອບຊາວປີແຫ່ງມະຫາປະຕິວັດເດືອນຕຸລາ ວາລະສານ "ໂບນເຊວິກ" ກະບອກສຽງຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ສະບັບເດືອນພະຈິກ ປີ ໑໙໓໗ ໄດ້ຂຽນວ່າ "ການປະຕິວັດເດືອນຕຸລາ ໄດ້ໄຂສັງກາດໃໝ່ໃຫ້ແກ່ ປະຫວັດສາດຂອງມະນຸດຊາດ, ແມ່ນສັງກາດແຫ່ງການປະຕິວັດກຳມາຊີບ, ແຫ່ງການກໍ່ສ້າງລັດທິສັງຄົມນິຍົມຢູ່ ສສສຊ, ເຊິ່ງເປັນບ້ານເກີດເມືອງນອນລວມຂອງນັກກຳມາຊີບທຸກໆຄົນ ແລະ ຂອງບັນດາປະຊາຊາດທີ່ຕົກເປັນຂ້າທາດ. ພາລະກິດຂອງພວກເຮົາຄືຕ້ອງ ຕໍ່ສູ້ຕ້ານທຸກໆເລ່ກົນຂອງພວກຈັກກະພັດ ທີ່ຜິປອງດັບສູນສະຫະພາບໂຊວຽດ ແລະ ຕ້ອງປົກປັກຮັກສາປະເທດສັງຄົມນິຍົມທຳອິດຂອງພວກເຮົາ".

ການເຄື່ອນໄຫວຖືກຕ້ອງຕາມກົດໝາຍຢູ່ໃນໝູ່ມະຫາຊົນ ແລະ ການໂຄສະນາທາງໜັງສືພິມຢ່າງຕັ້ງໜ້າ ໄດ້ປະກອບສ່ວນເຮັດໃຫ້ອິດທິພົນ ແລະ ອຳນາດ ຂອງພັກເພີ່ມທະວີຂຶ້ນຢູ່ໃນໝູ່ປະຊາຊົນ."ພວກກໍ່ກວນຄວາມສະຫງົບ"ຢັບນີ້ດຽວ (ໃນເມື່ອກ່ອນພວກນັກຂຽນຮັບຈ້າງຂອງພວກລ່າເມືອງຂຶ້ນໄດ້ຂະໜານນາມພັກກອມມູນິດອິນດູຈີນ ດີຈັ່ງຊີ້) ເຊິ່ງຖືກອຳນາດປົກຄອງລ່າເມືອງຂຶ້ນຕາມຈັບ, ແຕ່ປະຈຸບັນ ສຳລັບມະຫາຊົນແລ້ວພັກດັ່ງກ່າວແມ່ນກຳລັງການເມືອງອັນໜຶ່ງທີ່ເຂັ້ມແຂງ ມີການຈັດຕັ້ງອັນແໜ້ນໜາ ແລະ ມີລະບຽບວິໄນ. ໃນຂະບວນວິວັດແຫ່ງການຕໍ່ສູ້ເພື່ອຍາດເອົາສິດ ປະຊາທິປະໄຕ ແລະປົວແປງຊີວິດການເປັນຢູ່ຂອງປະຊາຊົນພັກສາມາດປຸກລະດົມມະຫາຊົນໃຫ້ລຸກຂຶ້ນຕໍ່ສູ້ ໄດ້ສຶກສາອົບຮົມທາງດ້ານແນວຄິດການເມືອງໃຫ້ "ມະຫາຊົນທີ່ມີຈຳນວນຫລວງຫລາຍ" ຊຶ່ງປະກອບດ້ວຍຄົນເປັນລ້ານໆ ຢູ່ໃນຕົວເມືອງ ແລະ ຊົນນະບົດ, ໄດ້ກໍ່ສ້າງ ຖັນແຖວໃໝ່ ແລະ ມີຈຳນວນຫລວງຫລາຍຂອງຫລັກແຫລ່ງພັກ. ໃນຄວາມໝາຍຄືແນວນີ້ ຂະບວນການແນວໂຮມປະຊາທິປະໄຕໄດ້ສ້າງປະຖົມປັດໄຈທາງດ້ານການຈັດຕັ້ງ ກໍຄືທາງດ້ານແນວຄິດອັນຈຳເປັນ ເພື່ອຈະສ້າງຕັ້ງແນວໂຮມເອກະພາບແຫ່ງຊາດ ໃນອະນາຄົດອັນນໍ່ໆນີ້ ແລະ ໂດຍຢູ່ພາຍໃຕ້ຄັນຫຼວງຂອງແນວໂຮມດັ່ງກ່າວ ການປະຕິວັດເດືອນສິງຫາ

ຈຶ່ງຍາດເອົາໄຊຊະນະມາໄດ້.

ສາມປີແຫ່ງການຕໍ່ສູ້ເພື່ອສ້າງຕັ້ງແນວໂຮມ ປະຊາທິປະໄຕອິນດູຈີນ (໑໙໓໖–໑໙໓໙) ເປັນເວລາທີ່ຍຸດໂທຍາຍແຫ່ງການສົມທົບວິທີການເຄື່ອນໄຫວ ຢ່າງຖືກຕ້ອງຕາມກົດໝາຍກັບເຄິ່ງຖືກຕ້ອງຕາມກົດໝາຍ ແລະ ການເຄື່ອນໄຫວໃຕ້ດິນ ໄດ້ຖືກນຳໃຊ້ເປັນເທື່ອທຳອິດ, ເປັນເວລາທີ່ພັກມີໂອກາດເປີດກວ້າງວຽກງານໂຄສະນາ ແລະ ວຽກງານການເມືອງອັນແທ້ຈິງ ທີ່ມີລັກສະນະມະຫາຊົນ ທັງເປັນເວລາທີ່ປະສົບຜົນສຳເລັດໃຫຍ່ຫລວງ ເຊັ່ນດຽວກັບຄວາມຜິດພາດທີ່ຫລີກບໍ່ພົ້ນ ໃນບາດລ້ຽວໃຫຍ່ໂຕ ມະໂຫຖານຄີ່ຈາງຊື. ສາມປີດັ່ງກ່າວເປີດໂອກາດໃຫ້ພັກກອມມູນິດອິນດູຈີນສະສົມບົດຮຽນ ອັນມີຄ່າໄດ້ຫລາຍ, ຖ້າວ່າຕົກຢູ່ໃນສະພາວະແບບອື່ນແລ້ວ ແມ່ນຕ້ອງເສຍເວລາເປັນສິບໆປີ ໃນຕໍ່ໆມາຍ້ອນກະໂຕສິ່ງດັ່ງກ່າວນີ້ເອງ ຈຶ່ງເປັນເຫດຜົນໃຫ້ບັນດາຜູ້ນຳພັກກອມມູນິດອິນດູຈີນເອີ້ນສະໄໝຕໍ່ສູ້ເພື່ອສ້າງຕັ້ງແນວໂຮມປະຊາທິປະໄຕອິນດູຈີນວ່າ ແມ່ນການຊ້ອມຮົບໃຫຍ່ຄັ້ງທີສອງຂອງການປະຕິວັດເດືອນສິງຫາ ເຊິ່ງເກີດຂຶ້ນຕາມຫລັງສະພາໂຊວຽດເງ່ຕິງ.

ຫງວຽນອາຍກວັກ ຕິດຕາມຢ່າງຈົດຈໍ່ຕໍ່ການຂະຫຍາຍຕົວຂອງຂະບວນການປະຊາທິປະໄຕ ຢູ່ໃນປະເທດຊາດ. ເພິ່ນຊອກຫູກວິທີຊ່ວຍເຫລືອສະຫາຍຂອງຕົນເທົ່າທີ່ຈະສາມາດເຮັດໄດ້ ດ້ວຍການໃຫ້ຄຳປຶກສາຫາລື ແລະ ດ້ວຍການແນະນຳ. "ຈົດໝາຍຈາກແດນໄກ" ຂອງເພິ່ນ ເຊິ່ງແມ່ນບົດຄວາມທີ່ຂຽນໃສ່ເຈ້ຍພັນກອກຢາແຜ່ນນ້ອຍໆນັ້ນ ໄດ້ເດີນທາງຜ່ານເປັນພັນໆກິໂລແມັດແຕ່ມົດສະກູ ໄປຮອດຮ່າໂນ້ຍ ແລະໄຊ່ງ່ອນ ແລ້ວຕໍ່ຈາກນັ້ນກໍ່ໄດ້ປະກົດຕົວຢ່າງເປັນປົກກະຕິຢູ່ໜ້າໜັງສືພິມ "ສຽງຂອງພວກເຮົາ"ແລະຢູ່ໃນໜັງສືພິມອັນຖືກຕ້ອງຕາມກົດໝາຍອື່ນໆຂອງພັກໂດຍໃສ່ນາມປາກກາວ່າ "ປ.ກ. ລິນ".

ຕໍ່ມາຢູ່ໃນບົດລາຍງານທີ່ສະເໜີຕໍ່ຄະນະບໍລິຫານງານສາກົນກອມມູນິດ ເພິ່ນໄດ້ສັງລວມຄຳເຫັນຈຳນວນຫລວງຫລາຍ ກ່ຽວກັບເສັ້ນທາງ ແລະ ວິທີການຕໍ່ສູ້ ເພື່ອສ້າງຕັ້ງແນວໂຮມເອກະພາບປະຊາທິປະໄຕ ຢູ່ໃນເງື່ອນໄຂຂອງຫວຽດນາມ. ເພິ່ນຂຽນໄວ້ວ່າ: "ແນວໂຮມຊາດ–ປະຊາທິປະໄຕຕ້ອງເຕົ້າໂຮມບໍ່ພຽງແຕ່ຄົນອິນດູຈີນເທົ່ານັ້ນ ແຕ່

ຍັງຕ້ອງມີທັງຄົນຝະລັ່ງຜູ້ກ້າວໜ້າ, ບໍ່ພຽງແຕ່ມີປະຊາຊົນຜູ້ອອກແຮງງານ ແຕ່ຍັງຕ້ອງມີທັງຊົນຊັ້ນນາຍທຶນແຫ່ງຊາດເຂົ້າຮ່ວມນຳ. ພັກຕ້ອງປະຕິບັດແນວທາງນະໂຍບາຍ ອັນຄ່ອງແຄ້ວຕໍ່ນາຍທຶນແຫ່ງຊາດ. ຕ້ອງດຶງດູດເອົາພວກເຂົາເຈົ້າ ແລະ ຮັກສາພວກເຂົາໄວ້ຢູ່ໃນຖັນແຖວຂອງແນວໂຮມ, ຕ້ອງສົ່ງເສີມການເຄື່ອນໄຫວຂອງພວກເຂົາ ເພື່ອພົນປະໂຫຍດລວມ, ຖ້າມີຄວາມຈຳເປັນ ກໍ່ຈຳກັດການເຄື່ອນໄຫວ ທາງດ້ານການເມືອງຂອງພວກເຂົາເຈົ້າ. ບໍ່ປະປ່ອຍໃຫ້ພວກເຂົາເຈົ້າຢູ່ນອກແນວໂຮມຢ່າງເດັດຂາດເພາະວ່າເຮັດແນວນັ້ນໝາຍຄວາມວ່າພວກເຂົາເຈົ້າເປັນໃຈກັບພວກປະຕິການ ຊຶ່ງກໍເທົ່າກັບວ່າເພີ່ມກຳລັງແຮງຕື່ມໃຫ້ແກ່ພວກນີ້ເທົ່ານັ້ນ".

ກ່ຽວກັບແນວທາງຍຸດໂທບາຍທີ່ພັກກອມມູນິດອິນດູຈີນຄວນປະຕິບັດ ຢູ່ໃນ ຂອບເຂດຂອງແນວໂຮມນັ້ນ ເພິ່ນເນັ້ນໜັກວ່າ: "ພັກຕ້ອງບໍ່ບັງຄັບໃຫ້ແນວໂຮມຮັບຮູ້ ບົດບາດນຳພາຂອງພັກ ແຕ່ຕ້ອງພິສູດໃຫ້ເຫັນເຖິງຄວາມຈົງຮັກພັກດີໃນລະດັບສູງ ຕໍ່ພາລະກິດລວມ ດ້ວຍການຕໍ່ສູ້ຢ່າງເສຍສະຫລະ ແລະ ດ້ວຍວຽກງານປະຈຳວັນ. ຈາກນັ້ນມະຫາຊົນຈຳນວນຫລວງຫລາຍ ຈຶ່ງຈະຮັບຮູ້ນະໂຍບາຍຂອງພັກວ່າແມ່ນຖືກຕ້ອງ ແລະ ຈະຮັບຮູ້ວ່າ ພັກມີຄວາມສາມາດນຳພາຂະບວນການ. ມີແຕ່ດ້ວຍວິທີດັ່ງກ່າວນີ້ເອງ ຈຶ່ງຈະຊ່ວຍໃຫ້ພັກຍາດເອົາຖານະນຳພາໄດ້... ຢາກເຮັດໄດ້ໜ້າທີ່ຂ້າງເທິງນີ້ ພັກຕ້ອງຕໍ່ສູ້ຢ່າງບໍ່ທໍ້ຖອຍຕ້ານແນວຄິດພັກພວກ, ກຳຈັດແນວຄິດແບ່ງພັກແຍກພວກ ແລະ ທັດສະນະອັນຄັບແຄບ, ຕ້ອງຈັດຕັ້ງສຶກສາຮ່ຳຮຽນພື້ນຖານຄວາມຮູ້ລັດທິມາກ-ເລນິນຢ່າງມີລະບົບເພື່ອຍົກລະດັບການສຶກສາ ແລະການເມືອງ ຂອງສະມາຊິກພັກ ໃຫ້ສູງຂຶ້ນຢ່າງເປັນປະຈຳ..."

ຫງວຽນອາຍກວັກ ໄດ້ດຳລົງຊີວິດ ແລະ ສຶກສາຢູ່ດິນແດນ ສະຫະພາບໂຊວຽດເປັນເວລາຫລາຍກວ່າສາມປີ. ນັ້ນຄືຊຸມປີທີ່ຟົດຟື້ນທີ່ສຸດ ຊຸມປີທີ່ປະຊາຊົນໂຊວຽດ ຍາດເອົາຜົນສຳເລັດມາໄດ້ດ້ວຍການອອກແຮງງານອັນຍິ່ງໃຫຍ່. ສິ່ງທີ່ເປັນຄວາມຝັນ ນັບເປັນຮ້ອຍໆປີຂອງອັດສະລິຍະບຸກຄົນຂອງມວນມະນຸດ, ສິ່ງທີ່ອາຈານຜູ້ຍິ່ງໃຫຍ່ຂອງ ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທັງໝົດທີ່ຖືກກົດຂີ່ ກ.ມາກ, ຟ.ອັງແກນ

ແລະ ວ.ອິ.ເລນິນ ໄດ້ຄາດຄະເນໄວ້ຢ່າງມີວິທະຍາສາດນັ້ນ ໄດ້ກາຍເປັນຄວາມຈິງແລ້ວ. ສັງຄົມນິຍົມໄດ້ຊະນະເລີດຢ່າງສົມບູນ ແລະ ຢ່າງຕາວປີ້ນບໍ່ໄດ້ ຢູ່ບົນດິນແດນໜຶ່ງສ່ວນຫົກຂອງໜ່ວຍພິພົບ. ໄຊຊະນະຂອງລັດທິສັງຄົມນິຍົມ ຢູ່ສະຫະພາບໂຊວຽດບໍ່ພຽງແຕ່ຢັ້ງຢືນເຖິງຄວາມຖືກຕ້ອງຂອງຫລັກມູນແຫ່ງລັດທິ ມາກ-ເລນິນ ກ່ຽວກັບ ການປ່ຽນແທນລະບອບທຶນນິຍົມ ດ້ວຍລະບອບສັງຄົມນິຍົມຢ່າງຫລີກລ່ຽງບໍ່ໄດ້ທາງພາວະວິໄສເທົ່ານັ້ນ ແຕ່ຫາກຍັງຢັ້ງຢືນເຖິງຄວາມສາມາດ ກໍ່ສ້າງສັງຄົມນິຍົມໄດ້ໃນພາກປະຕິບັດຕົວຈິງ, ຍິ່ງກວ່ານັ້ນ ຊ້ຳພັດຢູ່ປະເທດໜຶ່ງທີ່ຫລ້າຫລັງຫລາຍ. ອັນນີ້ເປັນສິ່ງທີ່ເຮັດໃຫ້ຊາວກອມມູນິດຫວຽດນາມ ກໍຄືນັກຮົບທຸກຄົນເພື່ອການປົດປ່ອຍຊາດ ແລະ ປົດປ່ອຍ ສັງຄົມ, ເພື່ອສັງຄົມນິຍົມຢູ່ທົ່ວໂລກມີຄວາມກະຕືລືລົ້ນທີ່ສຸດ.

ເຊັ່ນດຽວກັບນັກກອມມູນິດຕ່າງປະເທດຄົນອື່ນໆທີ່ເຮັດວຽກ ແລະ ສຶກສາ ຢູ່ມົດສະກູ ຫງວຽນອາຍກວັກ ມີຊີວິດຮ່ວມຢູ່ໃນຜົນປະໂຫຍດ, ຄວາມເບີກບານມ່ວນຊື່ນແລະຄວາມມຸ້ງມາດປາຖະໜາຂອງຊາວໂຊວຽດທັງໝົດ. ເພາະວ່າ ປະເທດທຳອິດ ຂອງສັງຄົມນິຍົມປຽບເໝືອນປະດິດພົນຂອງການປະຕິວັດໂລກ ໝາຍຄວາມວ່າ ຂອງນັກປະຕິວັດຂອງປະເທດອື່ນອີກ. ສະຫາຍ ນ.ນ.ໂກແລນນິບສະກີ, ໜຶ່ງໃນຈຳນວນ ອະດີດເພື່ອນຮ່ວມງານຂອງສາກົນກອມມູນິດ ໄດ້ຫວນຄືນເຖິງໄລຍະອັນເວລາໃນຊີວິດ ຂອງຫງວຽນອາຍກວັກດັ່ງນີ້:

"ໃນຊຸມປີດັ່ງກ່າວ ຂ້າພະເຈົ້າເປັນພະນັກງານພະແນກສຳພັນຕ່າງປະເທດທີ່ຂຶ້ນກັບຄະນະບໍລິຫານງານສາກົນກອມມູນິດ ແລະ ຂະນະດຽວກັນຂ້າພະເຈົ້າ ກໍ່ຮັບຜິດຊອບກຸ່ມນັກກອມມູນິດອິນໂດເນເຊຍ. ມື້ໜຶ່ງ ຢູ່ທີ່ຫໍພັກນັກຮຽນມະຫາວິທະຍາໄລ ກອມມູນິດສຳລັບຊາວຜູ້ອອກແຮງງານຂອງພາກຕາເວັນອອກທີ່ຕັ້ງຢູ່ສະໜາມຫລວງປູດສະກິນ, ຢູ່ໃນຫ້ອງນອນຂອງສະຫາຍ ອາລິມິນ (ນັກເຄື່ອນໄຫວທີ່ມີຊື່ສຽງຄົນໜຶ່ງຂອງພັກກອມມູນິດອິນໂດເນເຊຍ-ຜູ້ຂຽນ) ຂ້າພະເຈົ້າໄດ້ຖືກແນະນຳໃຫ້ຮູ້ຈັກກັບຄົນຫວຽດນາມ ຜູ້ໜຶ່ງຊື່ວ່າ ລີທົບ. ເພິ່ນສະໜິດສະໜົມກັບນັກກອມມູນິດອິນໂດເນເຊຍ ແລະ ມັກຈະໄປຫາພວກເຂົາເຈົ້າຢູ່ເລື້ອຍໆ. ຂ້າພະເຈົ້າຍັງຈື່ຄົນຜູ້ມີຄວາມລະອຽດລະອໍ ແລະ ສຸພາບອ່ອນໂຍນນັ້ນໄດ້ດີ. ສະຫາຍຜູ້ນັ້ນເວົ້າພາສາລັດເຊຍຢູ່ໃນຂັ້ນດີ ທັງໆທີ່ອອກສຽງ ບໍ່ຂອດ, ແຕ່ສະຫາຍກໍ່ມັກເວົ້າຢອກ.

ນັກຮຽນອິນໂດເນເຊຍ ,ຫວຽດນາມ, ຍີ່ປຸ່ນ, ຈີນ, ອາຣັບທີ່ພັກຢູ່ໃນຫໍພັກ ມີ

ຄວາມຮັກແພງກັນຄືຄົນໃນຄອບຄົວດຽວ. ເຖິງແມ່ນວ່າຄວາມໄຝ່ຝັນຢາກກັບຄືນສູ່ ປະເທດຊາດ, ກັບຄືນຫາສູ່ວຽກງານປະຕິວັດຢ່າງຕັ້ງຫນ້າກໍຕາມ, ແຕ່ພວກເຂົາ ກໍບໍ່ຕັດແຍກຕົນອອກຈາກປະຊາຊົນໂຊວຽດ. ພວກເຂົາດຳລົງຊີວິດຮ່ວມຢູ່ໃນຜົນປະໂຫຍດແລະຄວາມມຸ່ງມາດປາຖະຫນາຂອງປະຊາຊົນໂຊວຽດ. ພວກເຂົາເຂົ້າຮ່ວມໃນວັນເສົາກອມມູນິດ, ວັນອາທິດພວກເຂົາອອກແຮງງານຢູ່ໃນສວນເພີ່ມພູນເສດຖະກິດສຳຮອງ ຢູ່ນອກເມືອງເຊັ່ນດຽວກັບປະຊາຊົນໂຊວຽດ. ຫຼາຍໆຕອນແລງ ພວກເຂົາພາກັນໄປທີ່ໂຮງສາຍຮູບເງົາ "ເຊນຕຣາເລຍອານີຍ" ທີ່ຕັ້ງຢູ່ສະຫນາມຫລວງ ປູດສະກິນ ເພື່ອເບິ່ງຟິມສະຖານະການສູ້ຮົບຢູ່ ແອດສະປາຍ; ພວກເຂົາຮູ້ສຶກໂສກເສົ້າ ມ່ວນຊື່ນຮ່ວມກັບປະຊາຊົນຂອງສາທາລະນະລັດແອດສະປາຍ ຊຶ່ງແມ່ນຮຸ່ນທຳອິດຢູ່ໃນໂລກ ທີ່ກຳລັງສູ້ຮົບຢ່າງເອົາເປັນເອົາຕາຍ ຕ້ານພວກຟາດຊິດ ຜູ້ໂຫດຮ້າຍປ່າເຖື່ອນ. ພວກເຂົາເບິ່ງຟິມ "ຊາປາແອັບ" ສອງສາມເທື່ອດ້ວຍຄວາມນິຍົມຊົມຊອບ. ເວລານັ້ນພິມເລື່ອງນີ້ຫາກໍອອກສາຍ, ກຳມະກອນທັງໂຮງຊ່າງ ແລະ ໂຮງງານ, ທະຫານທັງກອງ ພາກັນໄປຊົມ ຮູບເງົາເລື່ອງນີ້.

ມ.ມ.ໂກແລນນິບສະກີ ທວນຄືນວ່າ: "ຂ້າພະເຈົ້າປະຫລາດໃຈເມື່ອເຫັນ ວ່າເຖິງແມ່ນວ່າ ລີນິບ ມີອາຍຸສູງກວ່າເພື່ອນຫວຽດນາມຄົນອື່ນໆກໍຕາມ, ແຕ່ກໍຍັງຫາວຫັນເຂົ້າຮ່ວມໃນວັນເສົາກອມມູນິດເຫມືອນກັນກັບຊາວຫນຸ່ມ, ສະຫາຍປີຕິຊົມຊື່ນຕໍ່ຫນ້າ ບັ້ນຮົບອອກແຮງງານຂອງປະຊາຊົນໂຊວຽດ, ໂສກເສົ້ານຳເຫດການອັນເສົ້າສະຫລົດໃຈຢູ່ແອດສະປາຍ. ຕອນກາງປີ ໑໙໒໗, ລີນິບ ຫາຍຫນ້າໄປຈາກມົດສະກູຢ່າງກະທັນຫັນ. ຈົນມາຮອດທ້າຍປີ ໑໙໔໕, ຂ້າພະເຈົ້າຈຶ່ງຮູ້ຈາກສະຫາຍເຊນາຊຸນ, ສະມາຊິກພັກກອມມູນິດອິນໂດເນເຊຍ ວ່າ ໂຮ່ຈີມິນ ປະທານປະເທດຫວຽດນາມໃຫມ່, ແທ້ຈິງແມ່ນ ສະຫາຍ ລີນິບ ຂອງເຮົານັ້ນເອງ".

ມາຮອດກາງປີ ໑໙໒໗ ໄດ້ມີການປ່ຽນແປງສຳຄັນເກີດຂຶ້ນໃນຊີວິດ ການເມືອງຂອງຈີນ. ຢູ່ຕໍ່ຫນ້າໄພຮຸກຮານຂອງພວກຂຸນເສິກຍີ່ປຸ່ນ ພັກກົກມິນຕັງ ແລະ ພັກກອມມູ-ນິດຈີນ ໄດ້ຕົກລົງກັນກ່ຽວກັບການຮ່ວມມືກັນ ຕໍ່ຕ້ານພວກຮຸກຮານ. ດັ່ງນັ້ນແນວໂຮມເອກະພາບແຫ່ງຊາດ ຊຶ່ງແມ່ນກຳລັງຝ່າຍຊ້າຍຈີນ ເປັນຜູ້ຕໍ່ສູ້ຢູ່ຕະຫລອດເວລາ ເພື່ອສ້າງຕັ້ງຂຶ້ນນັ້ນ ໄດ້ປະກົດເປັນຈິງທາງດ້ານການເມືອງ.

ເຫດການດັ່ງກ່າວ ມີຄວາມຫມາຍອັນສຳຄັນສຳລັບນັກຮັກຊາດຫວຽດນາມ ຍ້ອນ

ວ່າມັນເປີດໂອກາດໃຫ້ພວກເຂົາເຈົ້າກັບຄືນມາຢູ່ເຂດຈີນ ທີ່ຕິດກັບຊາຍແດນຫວຽດນາມ ແລະ ຢູ່ພາຍໃຕ້ການຄວບຄຸມຂອງພັກກົກມິນຕັງ, ແລະ ຈາກບ່ອນນີ້ພວກເຂົາ ອາດກັບເຂົ້າປະເທດໄດ້. ທ້າຍຊຸມປີ ສິວ ມີຊາວກອມມູນິດຫວຽດນາມຈຳນວນຫລວງຫລາຍ ທີ່ໄດ້ຮຽນຈົບ ແລະ ອອກຈາກສະຫະພາບໂຊວຽດ. ແຕ່ຍັງມີຈຳນວນໜຶ່ງຍັງຢູ່ທີ່ ມົດສະກູ ປະສົບກັບວັນເວລາທີ່ຫຍຸ້ງຍາກຂອງປີ ໑໙໔໑ ຮ່ວມກັບປະຊາຊົນໂຊວຽດ. ເມື່ອທະຫານຟາດຊິດເຢຍລະມັນ ບຸກເຂົ້າໃກ້ມົດສະກູ, ກອງພົນສາກົນຂອງນັກກອມມູນິດ ຕ່າງປະເທດ ທີ່ມີຕົນາຢູ່ມົດສະກູ ໄດ້ຖືກສ້າງຕັ້ງຂຶ້ນຕາມຂໍ້ລິເລີ່ມຂອງ ຊ.ດີມີຕະຣົບ. ກອງພົນນີ້ຂຶ້ນກັບກອງພົນນ້ອຍເຫລົ່າຍານຍົນ ຊຶ່ງເຮັດໜ້າທີ່ພິເສດ ແລະ ໄດ້ສູ້ຮົບຢ່າງອາດຫານ ຢູ່ເຂດນອກເມືອງມົດສະກູ. ອີງຕາມການຢັ້ງຢືນຂອງ ອີວານ ວີນາຣົບ ນັກຮົບອາວຸໂສຄົນໜຶ່ງ ຂອງຂະບວນການກຳມະກອນບູນກາຣີ ທັງເປັນທີ່ປຶກສາ ການເມືອງຂອງກອງພົນສາກົນໄດ້ເວົ້າວ່າ ໃນຈຳນວນນັກຮົບຕ້ານຟາດຊິດ ເຊິ່ງມີຄົນເຢຍລະມັນ, ໂອຕຣິສ, ແອດສະປາຍ ແລະ ບູນກາຣີ ເປັນແກ່ນສານຂອງກອງພົນນັ້ນ ຍັງມີນັກກອມມູນິດຫວຽດນາມຫົກຄົນ.

ຫວງວຽນອາຍກວັກ ດຳລົງຊີວິດຢູ່ໂຊວຽດຫົກປີກວ່າ ແລະເພິ່ນໄດ້ຖືບ່ອນນີ້ເປັນດັ່ງບ້ານເກີດເມືອງນອນແຫ່ງທີສອງຂອງຕົນ. ພາຍລຸນມາ ເພິ່ນເວົ້າວ່າ: "ຢູ່ປະເທດ ລັດເຊຍໂຊວຽດ ຂ້າພະເຈົ້າໄດ້ດຳລົງຊີວິດຢູ່ໃນບັນຍາກາດແບບ ເລນິນ".

ຊຸມປີດັ່ງກ່າວໄດ້ຝັງເລິກຢູ່ໃນຈິດໃຈເພິ່ນຕະຫລອດຊີວິດ, ເຮັດໃຫ້ຫວງວຽນອາຍກວັກ ເປັນເພື່ອນຜູ້ບໍລິສຸດຕະຫລອດໄປຂອງປະຊາຊົນໂຊວຽດ. ເວລາກັບຄືນ ຫວຽດນາມ, ເພິ່ນໄດ້ເລົ່າສູ່ເພື່ອນຮ່ວມຮົບຂອງເພິ່ນຟັງຢູ່ໃນຖ້ຳທີ່ມີນ້ຳປຽກຊຸ່ມຂອງພູຜາ ປ່າດົງຫວຽດບັກ ຫລືຢູ່ໃນຕູບໄມ້ໄຜ່ທີ່ບໍ່ແໜ້ນໜາພໍປານໃດ ກ່ຽວກັບດິນແດນລັດເຊຍ ທີ່ກວ້າງສຸດສາຍຕາ ແລະ ທີ່ຕັ້ງຢູ່ໄກແສນໄກ, ກ່ຽວກັບຜົນສຳເລັດອັນຍິ່ງໃຫຍ່ ຂອງປະຊາຊົນໂຊວຽດ ທີ່ກຳລັງກໍ່ສ້າງສັງຄົມນິຍົມຢ່າງມີໄຊ. ການເລົ່າເລື່ອງດັ່ງກ່າວຊ່ວຍໃຫ້ຜູ້ຟັງຮ້ອນຮຸມຂຶ້ນຫລາຍກວ່າກອງໄຟທັງໝົດ, ນຳເອົາກຳລັງໃໝ່ມາໃຫ້ພວກເຂົາແລະຈູດແສງສະຫວ່າງແຫ່ງຄວາມຕັດສິນໃຈຂຶ້ນໃນດວງຕາຂອງພວກເຂົາ.

ຊາວບ້ານປ່າ

໑

ໃນຕອນຕົ້ນເດືອນກຸມພາ ປີ ໑໙໔໑, ຄົນກຸ່ມໜຶ່ງມີຫົກຄົນໄດ້ບຸກປ່າຜ່າດົງຕຶບ, ຜ່ານພູສູງທີ່ສຸດຂອງເຂດຊາຍແດນແຂວງກວາງໄຕຂອງຈີນ ເຂົ້າໄປຍັງ ແຂວງກາວບັງ ຫວຽດນາມ, ພວກເຂົາໄດ້ເຄື່ອນອອກຈາກທິດຕາເວັນອອກສຽງເໜືອ ລົງໄປສູ່ທິດຕາເວັນຕົກສຽງໃຕ້. ທັງຫົກຄົນລ້ວນແຕ່ນຸ່ງໂສ້ງເສື້ອສີຄາມ ຊຶ່ງແມ່ນເຄື່ອງນຸ່ງ ທ້ອງຖິ່ນຂອງຊົນເຜົ່ານຸງ. ອອກໜ້າກ່ອນໝູ່ນັ້ນ ແມ່ນຜູ້ຊາຍອາຍຸແກ່ກວ່າໝູ່ ຮູບຮ່າງຈ່ອຍສູງ, ອາຍຸປະມານ ໕໐ ປີ. ເພິ່ນຖືໄມ້ຄ້ອນເທົ້າໄມ້ໄຜ່, ຈະໃຊ້ຄ້ຳຊູແຮງກໍ່ຕໍ່ເມື່ອລົງຄ້ອຍລົງຫວ. ເພິ່ນຍ່າງໄວ, ຖືກບາດຄ່ອຍໆ ເຕັ້ນຈາກໂງ່ນຫີນນີ້ໄປໂງ່ນຫີນອື່ນ ຄືຊາວໜຸ່ມ ຈົນເຮັດໃຫ້ບັນດາສະຫາຍໜຸ່ມຕ້ອງປະຫລາດໃຈ.

ແລງວັນໜຶ່ງ ພາຍຫລັງຈາກຜ່ານຮ່ອມພູແຄບໆມາໄດ້ ຢ່າງລຳບາກ ບຸກປ່າເຫລົ່າດອນເລົາອັນດົກໜາໄດ້ດ້ວຍຄວາມຍາກໜັກໜາ ຫົກຄົນກໍ່ຍ່າງເບັດໜ້າໄປຫາ

ຕົ້ນໄຣເຖົ້າ ໃຫຍ່ ທີ່ມີໃບດົກຫນາ ແລະ ເດ່ງ່າອອກປົກຫຸ້ມບໍລິເວນກວ້າງ ຈົນວ່າກວມເຮືອນຂອງປະຊາຊົນຈຳນວນຫນຶ່ງ. ຫ່າງຈາກຕົ້ນໄຣເຖົ້າບໍ່ໄກປານໃດແມ່ນຫລັກຫມາຍຊາຍແດນທີ່ເຮັດດ້ວຍຫີນຫມາຍເລກ ໑໐໘. ຕົວຫນັງສືຈີນແລະຕົວຫນັງສືຝະລັ່ງ ທີ່ຖືກຄວັດໄວ້ຢູ່ເທິງຫລັກຫມາຍດັ່ງກ່າວໄດ້ບອກແຈ້ງວ່າ: ຈາກນີ້ໄປແມ່ນດິນຂອງຫວຽດນາມ.

ຄົນຊົນເຜົ່ານຸງຜູ້ສູງອາຍຸກວ່າຫມູ່ ວາງໄມ້ຄ້ອນເທົ້າລົງຕີນໂພນ ຢ່າງລະມັດລະວັງ ຈາກນັ້ນກໍ່ຄູ້ເຂົ່າລົງດິນ ກຳເອົາດິນຫນຶ່ງກຳຂຶ້ນມາແປະໃສ່ຮິມສົບ. ພວກທີ່ຮ່ວມເດີນທາງຕ່າງກໍ່ເຮັດນຳ. ຕໍ່ມາ ເພິ່ນເງີຍຫນ້າຂຶ້ນດ້ວຍຄູ່ຕາມົວໆ ແນມເບິ່ງ ຢ່າງເຈາະຈົງໄປທາງກ້ຳໃຕ້, ຄືຈັ່ງວ່າເພິ່ນພະຍາຍາມແນມເບິ່ງບ້ານເກີດເມືອງນອນ ອັນແສນຮັກຢູ່ເບື້ອງຫລັງຄວັນຫມອກຂອງຂອບຟ້າພຸ້ນ. ຢູ່ໄກໆພຸ້ນ ໃຕ້ຕີນສາຍພູໃຫຍ່ທີ່ມອງເຫັນພໍເປັນລາງໆ ຢູ່ລະຫວ່າງກາງໄຮ່ສາລີ ແມ່ນເຮືອນຮ້ານປຸກຢັ່ງຢາຍກັນຢູ່. ມີນາຂັ້ນໄດສອງສາມຕອນທີ່ປູກເຂົ້າຂຽວອຸ່ມຫຸ່ມ ປະກົດຢູ່ເຄິ່ງພູເຕ້ຍ.

ຫງວຽນອາຍກວັກ, ແມ່ນອນວ່າ ແມ່ນຫງວຽນອາຍກວັກແທ້ໆ. ເພິ່ນແຍງເບິ່ງແຜ່ນດິນອັນອຸດົມສົມບູນຂອງປະເທດຊາດ ອັນແສນຮັກຢ່າງບໍ່ຮູ້ອີ່ມ. ຕະຫລອດ ໓໐ ປີທີ່ເພິ່ນຄອງຄອຍມາ ກໍ່ຈະມີພຽງແຕ່ວັນນີ້ເທົ່ານັ້ນຫັ້ນລະ. ມີຫລາຍຄັ້ງຫລາຍຫົນ ທີ່ເພິ່ນນອນຫລັບຕາຝັນເຫັນແຜ່ນດິນອັນແສນຮັກ ເມື່ອເພິ່ນໄດ້ກັບຄືນມາຢຽບເທິງ ແຜ່ນດິນຫວຽດນາມ ຫລັງຈາກທີ່ໄດ້ໃຊ້ຊີວິດພະຈົນໄພອັນຍາວນານຢູ່ຕ່າງປະເທດ ແລະ ບັດນີ້ເວລານາທີດັ່ງກ່າວກໍ່ໄດ້ມາເຖິງແລ້ວ. ເພິ່ນແນມເບິ່ງສາຍພູສະຫລັບສັບຊ້ອນ ທີ່ປະກົດຕົວຢູ່ໃນຄວັນຫມອກ ຢູ່ກ້ຳຂອບຟ້າເບື້ອງພຸ້ນ, ບ່ອນທີ່ຕາເວັນຫາ ກໍ່ຫາຍລັບໄປແລະຄິດເຖິງໄລຍະອັນຍາວນານ ເຖິງ ໓໐ ປີ "ແຫ່ງການພະເນຈອນ ຂ້າມນ້ຳ ຂ້າມທະເລ".

ຮູບພາບຂອງພື້ນດິນຊາຍທີ່ໄຮ້ຊີວິດ ແລະ ມືດຄື້ມ ຂອງທະເລຊາຍ ໂກບີ, ແລະຂອງເມືອງ ອູຣຸມຊີ, ໄຕອານ ຢຽນອານ ຊຶ່ງເກືອບວ່າບໍ່ມີຕົ້ນໄມ້ ແລະ ຕົ້ນຫຍ້າ ອັນເປັນບັນດາຕົວເມືອງທີ່ເພິ່ນໄດ້ເດີນຜ່ານໃນເດືອນຕຸລາ ປີ ໑໙໓໘, ພາຍຫລັງ ທີ່ເພິ່ນເລັດລອດຂ້າມຊາຍແດນໂຊວຽດ-ຈີນ ປະກົດພຸ່ງວາບຂຶ້ນໃນຄວາມຊົງຈຳ ຂອງເພິ່ນ . ເພິ່ນຍັງບໍ່ລືມການເດີນທາງອັນລຳບາກ ແລະ ເຕັມໄປດ້ວຍອັນຕະລາຍ ຈາກໄຕ-ອານຕໍ່ໃສ່ ຢຽນອານ ຊຶ່ງຕ້ອງໃຊ້ເວລານານເຖິງຫນຶ່ງອາທິດ. ໃນຫລາຍມື້ດັ່ງກ່າວ, ເພິ່ນຕ້ອງໄດ້ຍ່າງ ຍູ້ກວຽນບັນທຸກແຜ່ນແພມະຍົກມະຍອຍ ເພື່ອເຮັດເກີບແພ ໃຫ້ປະຊາ

ຈີນ ແລະ ທະຫານ. ມີກວຽນປະຫລາດບາງເຫລັ້ມ ທີ່ລາກແກ້ດວຍສັດສາມຊະນິດ:ງົວ ໜຶ່ງໂຕ, ລໍໜຶ່ງໂຕ ແລະ ມ້າໜຶ່ງໂຕ.

ຢຽນອານແມ່ນໜຶ່ງໃນບັນດາສູນກາງສຳຄັນຂອງເຂດປົດປ່ອຍ ແລະ ທັງແມ່ນບ່ອນຕັ້ງສຳນັກງານຂອງຄະນະນຳພັກກອມມູນິດຈີນ ແລະ ກອງທັບແດງຈີນ. ຢູ່ເທິງພູຫົວໂຫລ້ນ ສັງເກດເຫັນຖ້ຳຫລາຍແຫ່ງລ້າຍຄືກັບຮັງເຜີ້ງ, ນັ້ນແມ່ນສາງຂອງ ກອງທັບ ແລະ ທີ່ພັກອາໄສຂອງພະນັກງານພັກ, ທະຫານ ແລະ ຊາວນາຈາກບ້ານໃກ້ຄຽງ. ຢູ່ບ່ອນນີ້ເປັນບ່ອນສັນຍານໄພ,ເຮືອບິນຍີ່ປຸ່ນ ຊຶ່ງມັບວັນມັບບຸກລຸກນ່ານຟ້າເຂດປົດປ່ອຍໄດ້ຖິ້ມລະເບີດລົງໃສ່ຕົວເມືອງ ແລະ ເຂດໃກ້ຄຽງ.

ຢູ່ທີ່ຢຽນອານ ຫວວຽນອາຍກວັກ ໄດ້ພົບຄົນຈີນຈຳນວນໜຶ່ງທີ່ລັງເຄີຍກັນ ແຕ່ຄາວຢູ່ມົດສະກູທີ່ສຳນັກງານຄະນະບໍລິຫານງານສາກົນກອມມູນິດ. ເຖິງແມ່ນວ່າໃນໜັງສືເພີນໃສ່ຊື່ຄົນຈີນໂຮ່ກວາງກໍຕາມ ແຕ່ຕາມຄວາມຊິນເຄີຍເກົ່າ ພວກເຂົາກໍຍັງເອີ້ນ ຊື່ເພີນວ່າ ສະຫາຍ ລີນ. ຄົນຢຽນອານ ຜູ້ທີ່ຮູ້ຈັກກັນ ແຈ້ງໃຫ້ຫວວຽນອາຍກວັກ ຮູ້ວ່າ: ແນວໂຮມເອກະພາບແຫ່ງຊາດຢູ່ຈີນ ໄດ້ຖືກສ້າງຕັ້ງຂຶ້ນແລ້ວ. ລັດຖະບານ ຈຽງໄຄເຊັກ ປະກາດຮັບຮູ້ເຂດປົດປ່ອຍ ແລະ ກຳລັງປະກອບອາວຸດ ຊຶ່ງພັກກອມມູນິດຈີນເປັນຜູ້ນຳພາ. ນອກຈາກພາກເໜືອ ເຂດປົດປ່ອຍອື່ນໆຍັງໄດ້ຖືກສ້າງຂຶ້ນຢູ່ພາກກາງ ຂອງຈີນ, ແຖບລ້ອງແມ່ນ້ຳເຢືອງຕື ຊຶ່ງເປັນບ່ອນເຄື່ອນໄຫວຂອງກອງທັບ ທີ່ຢູ່ພາຍໃຕ້ການບັນຊາຂອງ ຕິນ ນັກກອມມູນິດຈີນ.

ຫວວຽນອາຍກວັກຕັດສິນໃຈເດີນທາງຜ່ານແຂວງເຊີນໄຕ ແລະ ໂຮ່ນານ ເພື່ອມຸ່ງໜ້າລົງສູ່ພາກໃຕ້. ໃນການເດີນທາງອັນຍາວໄກຄັ້ງນີ້ ຫວວຽນອາຍກວັກ ມີເພື່ອນຄົນຫວຽດນາມຜູ້ໜຶ່ງ ຊຶ່ງເພີນພົບເຂົາໂດຍບັງເອີນຢູ່ຢຽນອານຮ່ວມໄປນຳ. ເພື່ອຮັບປະກັນຄວາມປອດໄພ ແຕ່ລະຄົນຈຶ່ງມຸ່ງໜ້ມໃຫ້ເຂົ້າກັບບົດບາດຂອງໃຜລາວ ຄົນຫວຽດນາມຜູ້ນັ້ນສວມບົດບາດເປັນເຈົ້ານາຍທີ່ນັກເດີນທ່ອງທ່ຽວ, ສ່ວນຫວວຽນອາຍກວັກເປັນຄົນໃຊ້. ເຖິງແມ່ນວ່າຕ້ອງເສຍເວລາຫລາຍວັນ ຈຶ່ງໄປຮອດກວາເລີນ ຊຶ່ງເປັນເມືອງເອກຂອງແຂວງກວາງໄຕກໍຕາມ ແຕ່ພວກເຂົາກໍບໍ່ພົບເຫັນເຫດບັງເອີນຫຍັງເລີຍ.ພວກເຂົາພັກຢູ່ບ່ອນນີ້ໄລຍະໜຶ່ງ ແລະ ເລີ່ມຊອກຫາວິທີຕິດຕໍ່ກັບຄະນະກຳມະການ ຕ່າງປະເທດຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ.

ການຊອກຕິດຕໍ່ດັ່ງກ່າວ ເສຍເວລາຫລາຍ ແຕ່ບໍ່ມີໝາກຜົນຫຍັງໝົດ ເພາະ

ສະນັ້ນ ຈຶ່ງຕ້ອງຍົກຍ້າຍໄປຢູ່ແຂວງຢູນນານ. ສຸດທ້າຍຫງວຽນອາຍກວັກ ໄດ້ພົບກັບຄົນຕິດຕໍ່ຂອງພັກຢູ່ເມືອງໂກນມິງ. ຈາກນັ້ນມາບໍ່ດົນ ເພິ່ນກໍໄດ້ພົບກັບບັນດາຜູ້ນຳພັກກອມມູນິດອິນດູຈີນ ໃນຈຳນວນນັ້ນມີສະຫາຍ ເຈືອງຈິງ, ຟາມວັນດົງ, ວໍຫງວຽນຢາບ, ຟູງຈິກຽນ ແລະ ສະຫາຍອື່ນໆ. ການພົບພໍ້ກັນຄັ້ງນີ້ ກົງກັບເວລາທີ່ໄດ້ຮັບຂ່າວອັນ ບໍ່ຄາດຄິດມາກ່ອນ ມາຈາກທະວີບເອີລົບທີ່ຢູ່ຫ່າງໄກ: ໃນວັນທີ ໑໔ ເດືອນມິຖຸນາ ປາຣີ ໄດ້ປະລາໄຊຍ້ອນການບຸກໂຈມຕີຂອງກອງທັບຮິດແລ ແລ້ວສອງສາມມື້ຕໍ່ມາ ປະເທດຝະລັ່ງກໍຍອມຈຳນົນ. ເຫດການດັ່ງກ່າວເຮັດໃຫ້ສະຖານະການປ່ຽນແປງໄປຢ່າງເຖິງກົກເຖິງຮາກ ແລະ ຮຽກຮ້ອງໃຫ້ຕ້ອງມີຄວາມຕັດສິນໃຈຢ່າງຮີບດ່ວນ. ໃນການປະຊຸມຂອງສະມາຊິກພັກກອມມູນິດອິນດູຈີນທັງໝົດທີ່ມີໜ້າຢູ່ໂກນມິງ ຫງວຽນອາຍກວັກ ຍົກບັນຫາກ່ຽວກັບຄວາມຈຳເປັນຕ້ອງຮີບຮ້ອນຈັດສົ່ງພະນັກງານພັກສ່ວນໃຫຍ່ກັບຄືນປະເທດ. ທີ່ປະຊຸມ ຍັງໄດ້ຕົກລົງຈັດສົ່ງພະນັກງານພັກຈຳນວນໜຶ່ງ ຢ່າງຮີບດ່ວນ ກັບໄປນະຄອນຕິງໄຕ ຊຶ່ງເປັນເມືອງໜຶ່ງຢູ່ໃກ້ກັບຊາຍແດນຈີນ-ຫວຽດ ເພື່ອກະກຽມຂ້າມຊາຍແດນເຂົ້າໄປຫວຽດນາມ.

ຫງວຽນຍັງບໍ່ລືມເຮືອໂດຍສານຂະໜາດໃຫຍ່ລຳໜຶ່ງທີ່ບັນທຸກແຂກໄປ ຕິງໄຕ. ນອກຈາກພວກເພິ່ນແລ້ວ ຢູ່ເທິງເຮືອຍັງມີແຂກໂດຍສານຈີນ ແລະ ຫວຽດນາມ ແປກໜ້າຈຳນວນໜຶ່ງ. ເພື່ອຄວາມຮອບຄອບ ຫງວຽນອາຍກວັກ ຈຶ່ງສວມບົດບາດເປັນນັກໜັງສືພິມທ້ອງຖິ່ນ ແລະ ເວົ້າແຕ່ພາສາຈີນເທົ່ານັ້ນ. ພວກເພິ່ນພະຍາຍາມບໍ່ເວົ້າຫຼາຍ ແຕ່ກໍປິດອຳຄວາມຕື່ນເຕັ້ນໄວ້ຍາກທີ່ສຸດ ຍ້ອນວ່າອີກບໍ່ດົນພວກເຂົາເຈົ້າຈະກັບ ໄປຮອດປະເທດຊາດ. ຍັງອີກບໍ່ເທົ່າໃດຮ້ອຍແມັດ ກໍຈະແມ່ນທ່າຈອດສຸດທ້າຍ ມີສະຫາຍໜຶ່ງສູບຢາ ແລະ ເຮັດຂີ້ຢາຊູລົງໃສ່ໂສ້ງຕົນເອງ ຈົນໄຟໄໝ້ໂສ້ງ. ຫງວຽນອາຍກວັກຫຼົງປາກຮ້ອງຂຶ້ນໝົດແຮງເປັນພາສາຫວຽດຢ່າງບໍ່ຮູ້ສຶກຕົວວ່າ:

" ບໍ່ເຫັນຊັ້ນບໍ ? ໄຟໝັ້ນນ່າ ! "

ບໍ່ດົນ ກໍພາກັນໄປຮອດທ່ານ້ຳ, ເມື່ອເວລາຄິດພໍ້ເລື່ອງຈ້າງໂຕນີ້ຍາມໃດ ພວກເຂົາເຈົ້າກໍພາກັນຫົວຈົນນ້ຳຕາໄຫລ.

ການພົບພໍ້ທີ່ບໍ່ຄາດຝັນມາກ່ອນຢູ່ທີ່ຕິງໄຕ ແມ່ນການພົບພໍ້ທີ່ໜ້າຍິນດີ. ຊາຍໜຸ່ມ

ກຸ່ມໃຫຍ່ທີ່ມີນ້ຳໃຈປະຕິວັດຂອງແຂວງກາວບັງໄດ້ລັດລອດຂ້າມຊາຍແດນໄປຈີນ ເພື່ອຊອກຫາຜູ້ນຳຂະບວນການຮັກຊາດ ແລະ ເພື່ອເຂົ້າຮ່ວມປະຕິວັດ. ຜູ້ທຳອິດທີ່ພວກຊາວໜຸ່ມພົບຢູ່ຕົງໄຕ ຄື ເຈືອງໂບຍກົງ, ຜູ້ນຳພັກຄະນະຊາດ ທີ່ອົບພະຍົບຈາກຫວຽດນາມມາແຕ່ດົນແລ້ວ ແລະ ເຂົ້າໄປຢູ່ຝ່າຍຂວາພັກກົກມິນຕັງຈີນ. ເຖິງແມ່ນວ່າເຂົາ ບໍ່ຮູ້ຫຍັງດ້ານການທະຫານ ແຕ່ຈຽງໄຄຊັກກໍປະດັບຂັ້ນພົນຕີໃຫ້ເຂົາ ແລະ ມອບໝາຍໜ້າທີ່ໃຫ້ເປັນຜູ້ຊັກຈູງເອົາພວກທີ່ສະໜັບສະໜູນພັກກົກມິນຕັງໃນໝູ່ຊາວ ຫວຽດນາມອົບພະຍົບທີ່ອາໄສຢູ່ຈີນ. ເມື່ອພົບກັບຊາວໜຸ່ມທີ່ມາຈາກກາວບັງ, ເຈືອງໂບຍກົງ ກໍຊຸຍໂມ້ສຳຫາວ ແນະນຳຕົນເອງວ່າ "ເປັນນັກເຄື່ອນໄຫວຮັກຊາດທີ່ມີຊື່ສຽງ" ເປັນນັກປະຕິວັດຜູ້ອາວຸໂສ ". ແຕ່ວ່າກິລິຍາຫຍາບຄາຍ ແລະ ຄວາມເວົ້າໂອ້ອວດ ສຳຫາວຂອງເຂົາ ໄດ້ເຮັດໃຫ້ກຸ່ມຊາວໜຸ່ມກາວບັງມີຄວາມຮູ້ສຶກລະແວງສົງໄສ. ຈາກນັ້ນບໍ່ດົນຊາວໜຸ່ມສ່ວນໃຫຍ່ກໍເລີ່ມເຂົ້າໃຈວ່າ ເຂົາບໍ່ແມ່ນນັກປະຕິວັດ ແຕ່ຫາກແມ່ນຄົນປະເພດທີ່ມເສື້ອປະຕິວັດ ເຊິ່ງຄົນຫວຽດນາມມັກເອີ້ນວ່າ "ຫົວມັງກອນຫາງງູ". ຖ້າວ່າຫວງວຽນອາຍກວັກ ພ້ອມດ້ວຍເພື່ອນຂອງເພິ່ນ ມາຊ້າໜ້ອຍດຽວ ຊາວໜຸ່ມສ່ວນຫລາຍກໍຄົງຈະຂ້າມຊາຍແດນກັບຄືນປະເທດຫວຽດນາມ.

ການພົບພໍ້ຄັ້ງນີ້ ເປັນປະໂຫຍດສຳລັບທັງສອງຝ່າຍ. ໃນຈຳນວນຊາວໜຸ່ມ ມີຜູ້ພາທາງທີ່ຊຳນິຊຳນານຫລາຍຄົນ ເຊິ່ງໄດ້ຮູ້ຈັກເສັ້ນທາງປິດລັບໃນໂຄກໃນປ່າເປັນຢ່າງດີ. ພວກເຂົາຍິນດີພາຄົນທີ່ຫາກໍຮູ້ຈັກໃໝ່ຈຳນວນໜຶ່ງ ລັດລອດ ຂ້າມຊາຍແດນ ໄປຫວຽດນາມ. ໃນຂະນະທີ່ກະກຽມຂ້າມຊາຍແດນ ຫວງວຽນອາຍກວັກ ໄດ້ເປີດຊຸດຮຽນການເມືອງໄລຍະສັ້ນໃຫ້ຊາວໜຸ່ມກຸ່ມນີ້. ຊຸດຮຽນດັ່ງກ່າວໄດ້ດູດດຶງເອົາຊາວ ຫວຽດນາມຕື່ມເທື່ອລະກ້າວ, ໃນນັ້ນມີ ໔໐ ຄົນທີ່ເຄີຍຮັບໃຊ້ຢູ່ໃນກອງທັບຈຽງໄຄຊັກ,ພວກເຂົາເຂົ້າຮຽນຢູ່ໃນຊຸດຮຽນດັ່ງກ່າວ ແລະ ກະວົນກະວາຍຢາກກັບຄືນປະເທດ. ການຮ່ຳຮຽນຢູ່ທີ່ຊຸດຮຽນນີ້ ໄດ້ດຳເນີນຢູ່ເຂດນອກເມືອງທີ່ບໍລິເວນປ່າແຫ່ງໜຶ່ງຢູ່ບົນເປີ້ນພູ. ພິທີອັດຊຸດຮຽນໄດ້ຈັດຕັ້ງຂຶ້ນກ່ອນໜ້າບຸນປີໃໝ່. ຜູ້ທີ່ຮຽນຈົບຊຸດຮຽນດັ່ງກ່າວ ໄດ້ລຽນແຖວຢູ່ເດີ່ນກາງປ່າ, ຫລັງຈາກນັ້ນແຕ່ລະຄົນຍ່າງອອກຈາກແຖວ ແລ້ວຈູບທຸງແດງ ດາວຄຳ. ຊາວໜຸ່ມກາວບັງກຸ່ມນີ້ນັບທັງຜູ້ທີ່ພວກເຂົາຫາກໍຮູ້ຈັກໃໝ່ໆຍັງບໍ່ເຄີຍເຫັນທຸງ ຄືແນວນີ້ຈັກເທື່ອ, ໃນປະຈຸບັນທຸງດັ່ງກ່າວເປັນທຸງປະຈຳຊາດຂອງສາທາລະນະລັດສັງຄົມນິຍົມຫວຽດນາມ.ກ່ອນໜ້ານັ້ນສອງເດືອນທຸງແດງດາວຄຳໄດ້ປະກົດຕົວເປັນເທື່ອທຳອິດຢູ່

ໃນກຳມືຂອງພວກລູກຣື້ອນ ຢູ່ແຄມແມ່ນ້ຳຕຽນຢາງເຂດນາມກີ່.

ພາຍຫລັງທີ່ຊຸດຣຽນດັ່ງກ່າວສິ້ນສຸດລົງ ນັກຮົບໃຫມ່ຂອງການປະຕິວັດ ໄດ້ຖືກຈັດແບ່ງເປັນຫລາຍຈຸ້ມນ້ອຍໆ ກັບຄືນປະເທດຊາດ. ຫລັງຈາກໄປສົ່ງຈຸດສຸດທ້າຍ ນັ້ນແລ້ວ ຫວງວຽນອາຍກວັກ ເວົ້າຈາພາທີກັບສະຫາຍຂອງຕົນດ້ວຍຄວາມມ່ວນຊື່ນວ່າ:

" ໃນທີ່ສຸດ ນິກອິນຊີ ໔໓ ຕົວກໍໄດ້ບິນໄປແລ້ວ. ໃນອີກບໍ່ດົນພວກເຂົາກໍຈະສົ່ງຂ່າວດີມາໃຫ້. ພວກເຮົາກໍຈະກະກຽມອອກເດີນທາງເຊັ່ນດຽວກັນ".

ບັດນີ້ ຈາກຈອມພູທີ່ເປັນເສັ້ນຊາຍແດນ ຫວງວຽນອາຍກວັກແນມເຫັນ ປາກບໍ່. ໂງ່ນຫີນເປັນຊັ້ນເປັນຫລືບ ຄ້າຍຄືວ່າຕະຫລຸດຕ່ຳລົງຊຸກໄຊ້ຕາມເປັ້ນພູ ຊຶ່ງເປັນເສັ້ນທາງທີ່ນຳໄປເຖິງບ້ານທີ່ຢູ່ຫ່າງໄກ. ຢູ່ແຫ່ງນັ້ນແມ່ນປະເທດຊາດອັນແສນຮັກ. ໄລຍະໃຫມ່ໄດ້ເລີ່ມຕົ້ນຂຶ້ນແລ້ວ ໃນຊີວິດຂອງຫວງວຽນອາຍກວັກ ແລະ ໃນປະຫວັດສາດ ຂອງຂະບວນການປົດປ່ອຍຫວຽດນາມ. ສິ່ງທີ່ເປັນສັນຍາລັກກໍແມ່ນວ່າ ຄືກັນກັບປີ ໑໙໓໐ ເຊິ່ງເປັນເວລາສ້າງຕັ້ງພັກ ໄລຍະນີ້ເລີ່ມຕົ້ນຂຶ້ນໃນມື້ບຸນປີໃຫມ່ອັນເບີກບານມ່ວນຊື່ນ , ຊຶ່ງເປັນມື້ບຸນຕ້ອນຮັບລະດູບານໃຫມ່ຂອງຊາວຫວຽດນາມທຸກຄົນ, ເຖິງແມ່ນວ່າຈະຫລິ້ນບຸນປີໃຫມ່ຢູ່ແຫ່ງໃດກໍຕາມ ແຕ່ກໍຍັງຕິດພັນກັບຄວາມຫວັງ ແລະ ຄວາມປາດຖະຫນາອັນລົ້ລບຂອງຕົນຢູ່ສະເຫມີ.

ໃນຂະນະທີ່ກະກຽມເລັດລໍດຂ້າມຊາຍແດນ ພວກເຂົາເຈົ້າຕັດສິນໃຈວ່າຈະໄປອາໄສຢູ່ເຮືອນຄົນຊົນເຜົ່ານຸງຄົນຫນຶ່ງ ຊື່ວ່າ ໄມລີ ທີ່ເປັນໃຈນຳການປະຕິວັດ. ເມື່ອໄປຮອດເຮືອນຂອງໄມລີ ຫວງວຽນອາຍກວັກເຫັນໂລດວ່າມັນບໍ່ເປັນດັ່ງຄວາມຕັ້ງໃຈ:ຄົນຕັ້ງຫົກຄົນຈະມາອາໄສຢູ່ໃນຕູບຫຍ້າຄາຫລັງດຽວທີ່ມີຝາສອງດ້ານເຮັດດ້ວຍໄມ້ພາງ ຄົງຈະເປັນການບໍ່ສະດວກປານໃດ. ຍິ່ງກວ່ານັ້ນ ເຮືອນຫລັງນີ້ພົດຢູ່ກາງບ້ານ ບໍ່ຮັບປະກັນຄວາມປອດໄພ ສະນັ້ນໄມລີຈຶ່ງຮີບແຈ້ງຂ່າວໃຫ້ຮູ້ທັນທີໂລດວ່າ:

"ຫ່າງຈາກບ້ານນີ້ບໍ່ໄກປານໃດ ຖ້າວ່າເຂົ້າໄປໃນປ່າເລິກ, ຈະມີຖ້ຳຫນຶ່ງ ຊຶ່ງເປັນບ່ອນປິດລັບທີ່ສຸດ. ທຸກຄັ້ງທີ່ພວກໂຈນມາປຸ້ນຊາວບ້ານ ພວກເຮົາລ້ວນແຕ່ເຂົ້າໄປລີ້ຊ່ອນປ່ອນຕົວຢູ່ຖ້ຳບ່ອນນີ້ຫັ້ນລະ".

ໄມລີ ເປັນຜູ້ພາພວກເຂົາເຈົ້າເດີນໄປຕາມເສັ້ນທາງນ້ອຍໆຄົດລ້ຽວໄປຕາມປ່າ

ຈາກນັ້ນພວກເຂົາກໍພາກັນຂຶ້ນເທິງຈອມພູໜ່ວຍໜຶ່ງ ຊຶ່ງເກືອບວ່າເປັນພູໂຫລ້ນ. ຖ້ຳກໍແຄບແທ້ແຕ່ຫາທີ່ກິນແຫຍ້ກັນຢູ່ກໍພໍໄດ້. ແປະທາງເຂົ້າຖ້ຳມີຫີນໃຫຍ່ກ້ອນໜຶ່ງ ຊຶ່ງວັນເວລາ ແລະ ລົມຝົນໄດ້ເຊາະໂງ່ນຫີນກ້ອນນີ້ຈົນກຽງ ສະນັ້ນເມື່ອແນມເຫັນ ກໍເຂົ້າໃຈໂລດວ່າ ແມ່ນຮູບຈຳລອງ. ໄມລີ ເອີ້ນຖ້ຳດັ່ງກ່າວວ່າ "ກົກບໍ່" ຕາມພາສາຂອງທ້ອງຖິ່ນແລ້ວ "ກົກບໍ່" ມີຄວາມໝາຍວ່າ "ຕົ້ນກຳເນີດ". ອ້ອມຮອບບໍລິເວນນີ້ ມີຫ້ວຍນ້ຳນ້ອຍສາຍໜຶ່ງອອກບໍ່ມາຈາກໃສກໍບໍ່ຮູ້ຈັກ ໃນຂົງເຂດນີ້ໝົດລະ, ສາຍນ້ຳນ້ອຍໄຫລກຽວວຽນອ້ອມໂງ່ນຫີນ, ຈາກນັ້ນກໍໄຫລລົງໃຕ້ເລື້ອຍໆ, ນ້ຳທີ່ໄຫລລົງກໍໄປປະທະກັບ ໂງ່ນຫີນທີ່ຢູ່ກາງນ້ຳແລ້ວແຕກເປັນເມັດນ້ອຍໆສີຂາວບໍລິສຸດປິວກົ້ວທົ່ວບໍລິເວນແຫ່ງນີ້.

ທຸກຄົນ ລ້ວນແຕ່ມີຄວາມຮູ້ສຶກພໍໃຈກັບບ່ອນພັກຊົ່ວຄາວແຫ່ງນີ້.ພວກເຂົາພາກັນຫາມທ່ອນໄມ້ ຈາກບ້ານມາໃຊ້ເປັນຕຽງນອນ, ແລ້ວເອົາໃບໄມ້ແຫ້ງ ແລະ ຫຍ້າແຫ້ງມາປູ ໃນທັນທີນັ້ນໂລດ. ເມື່ອສັບຊ້ອນບ່ອນຢູ່ບ່ອນນອນຮຽບຮ້ອຍແລ້ວ ທຸກຄົນຕົກລົງກັນອອກໄປກວດກາເບິ່ງບໍລິເວນອ້ອມແອ້ມ. ເມື່ອມາຮອດແຄມຫ້ວຍ ຫງວຽນອາຍກວັກໃຫ້ຂໍ້ສັງເກດວ່າ:

" ຂ້ອຍມີຄວາມຄິດຄືຈັ່ງຊີ້: ລຳຫ້ວຍສາຍນີ້ໃສສະອາດຄືໄຂ່ມູກນີ້ລະ ຊ້ຳຍັງອອກບໍ່ຢູ່ບ່ອນນີ້, ສະນັ້ນຄວນຕັ້ງຊື່ວ່າຫ້ວຍເລນິນ. ສ່ວນພູໃຫຍ່ຢູ່ເບື້ອງນັ້ນ (ເພິ່ນ ຊີ້ມືໄປກ້ຳຊ້າຍ) ພວກເຮົາເອີ້ນວ່າ ຈອມພູກາກ ມາກ. ພວກສະຫາຍມີຄວາມເຫັນຄືແນວໃດ ?"

ທຸກໆເຊົ້າ ຫງວຽນອາຍກວັກຕື່ນນອນ ພ້ອມກັບຕອນຕາເວັນພວມຂຶ້ນ ແລ້ວກໍປຸກພວກອື່ນໃຫ້ຕື່ນນອນ. ເພິ່ນໝັ່ນຫັດກາຍຍະບໍລິຫານຢູ່ເດີ່ນຕິດກັບຖ້ຳ ຊຶ່ງແມ່ນເພິ່ນເອງເປັນຜູ້ປັດກວາດເຮັດອະນາໄມ. ເພິ່ນໃຊ້ສາກຕຳເຂົ້າແທນເຫລັກຍົກນ້ຳໜັກ. ເພິ່ນມັກຍ່າງຕີນເປົ່າປີນຂຶ້ນພູສູງຊັນ, ພູສູງຫລາຍເທົ່າໃດແຮ່ງມັກປີນ. ເພິ່ນອະທິບາຍວ່າ: "ຕ້ອງຫັດຍ່າງເພື່ອໃຫ້ລົງຕີນ". ຫລັງຈາກການຫັດແຮງ ເຖິງແມ່ນວ່າດິນຟ້າອາກາດຈະເປັນແນວໃດກໍຕາມ ເພິ່ນກໍຍັງລົງອາບນ້ຳຫ້ວຍຈົນຮອດສິ້ນໜາວ. ເສັ້ນທາງແຕ່ຖ້ຳໄປຮອດຫ້ວຍກໍຄ້ອຍຫລາຍທີ່ສຸດ, ມີພຸ່ມໄມ້ໜານປົກຫຸ້ມທາງເດີນ. ພາຍຫລັງທີ່ຝົນເຊົາຕົກ, ທາງໜື່ນຄືລາດດ້ວຍນ້ຳມັນໝູ, ກວ່າຈະປີນຂຶ້ນມາໄດ້ກໍລຳບາກທີ່ສຸດ. ສ່ວນຢູ່ຕາມຕົ້ນໄມ້ກໍມີໂຕທາກໂຕປີນເຕັມໄປໝົດ ພວກມັນເຕັ້ນລົງມາຈັບຫົວ ຈັບຫລັງຄືກັນກັບແມ່ເຜິ້ງ.

ຫງວຽນອາຍກວັກນັ່ງເຮັດວຽກຢູ່ແຄມຫ້ວຍ ເພິ່ນເລືອກເອົາໂງ່ນຫີນກ້ຽງ ໃຊ້ເປັນໂຕະຂຽນຫນັງສື.

ຝົນຕົກຕິດຕໍ່ກັນຫລາຍມື້ ຖ້ຳກໍປຽກຊຸ່ມຫນາວເຢັນຈົນຊອດກະດູກ. ຢູ່ເພດານຖ້ຳມີກ້ອນຫີນທີ່ມີຮູບປະພັນແປກປະຫລາດຖືກປົກຫຸ້ມດ້ວຍໄຄ ນ້ຳເມັດນ້ອຍໆຢອດລົງມາຢ່າງສະຫມ່ຳສະເຫມີບໍ່ຢຸດບໍ່ເຊົາເປັນຈັກເທື່ອ. ຕອນກາງຄືນ ແຕ່ລະຄົນປ່ຽນຜຽນກັນດັງໄຟເພື່ອໃຫ້ມີຄວາມອົບອຸ່ນ. ກ່ອນເຂົ້ານອນ ພວກຄົນທີ່ອາໄສຢູ່ໃນຖ້ຳ ມັກນັ່ງອ້ອມກອງໄຟຟັງຜູ້ນຳ ແລະ ເພື່ອນຜູ້ມີອາຍຸສູງທີ່ເຄີຍຜ່ານຊີວິດມາບໍ່ຫນ້ອຍເລົ່າເລື່ອງກ່ຽວກັບ ພວກເພິ່ນ. ໂຮ່ຈີມິນເລົ່າກ່ຽວກັບການທີ່ເພິ່ນໄປຮອດສະຫະພາບໂຊວຽດວ່າເປັນຄືແນວໃດ, ເປັນດ້ວຍເຫດໃດເພິ່ນຈຶ່ງບໍ່ທັນໄດ້ພົບເລນິນ, ກ່ຽວກັບຜົນສຳເລັດ ຊຶ່ງບ້ານເກີດເມືອງນອນຂອງການປະຕິວັດສັງຄົມນິຍົມທຳອິດໄດ້ບັນລຸແລ້ວ. ເພິ່ນສາມາດເລົ່າໄດ້ດີ ຈົນເຖິງຂັ້ນວ່າ ຜູ້ຟັງສາມາດວາດພາບທັດສະນີຍະພາບຂອງລັດເຊຍ ແລະ ກິດຈະການ ກໍ່ສ້າງອັນໃຫຍ່ໂຕມະໂຫຖານຂອງປະເທດນີ້. ຜ່ານຈາກການເລົ່າດັ່ງກ່າວ ພວກເຂົາຈຶ່ງຮູ້ກ່ຽວກັບຄວາມກ້າຫານຂອງປະຊາຊົນໂຊວຽດໃນການເປັນຜູ້ບຸກເບີກຂົ້ວໂລກເຫນືອ , ກ່ຽວກັບວິລະກຳອັນຍິ່ງໃຫຍ່ຂອງນັກບິນໂຊວຽດໂນການຂັບຍົນບິນຜ່ານຂົ້ວໂລກເຫນືອໄປຍັງປະເທດອາເມລິກາ.

ຫງວຽນອາຍກວັກ ແລະ ເພື່ອນຮ່ວມຮົບຂອງເພິ່ນ ໄດ້ຝັງວັນເວລາທີ່ດຳລົງຊີວິດຢູ່ທີ່ປາກບໍໄວ້ໃນຄວາມຊົງຈຳ ໂດຍຖືວ່ານັ້ນເປັນວັນເວລາແຫ່ງຄວາມເບີກບານມ່ວນຊື່ນ ທີ່ເຕັມໄປດ້ວຍການລໍຄອຍການປ່ຽນແປງອັນຍິ່ງໃຫຍ່. ພວກເຂົາແມ່ນຜູ້ເຂົ້າຮ່ວມໂດຍກົງໃນການປະດິດສ້າງປະຕິວັດ. ຢູ່ຕໍ່ຫນ້າພວກເຂົາ ແລະ ຍ້ອນພວກເຂົານັ້ນເອງທີ່ ຊີວິດໃຫມ່ ຄົນໃຫມ່ ແລະ ການພົວພັນແບບໃຫມ່ ລະຫວ່າງຄົນກັບຄົນ ໄດ້ກຳເນີດຂຶ້ນ. ເຖິງແມ່ນວ່າຫວຽດນາມຍັງດຳລົງຊີວິດຢູ່ໃຕ້ແອກຄອບຄອງຂອງ ລະບອບລ່າເມືອງຂຶ້ນ ແຕ່ຢູ່ແຫ່ງນີ້ ຢູ່ປາກບໍນີ້ ແລະ ຢູ່ເຂດອ້ອມແອ້ມບໍລິເວນແຫ່ງນີ້ ໃນຕົວຈິງການປະຕິວັດໄດ້ຮັບໄຊຊະນະແລ້ວ ແລະ ລະບອບໃຫມ່ ລະບອບປະຊາທິປະໄຕກຳລັງກາຍ ເປັນຄວາມຈິງ.

ບໍ່ມີຍາມໃດທີ່ຫງວຽນອາຍກວັກໄດ້ທຸ້ມເທເຫື່ອແຮງໃຫ້ວຽກງານຢ່າງສຸດຈິດ ສຸດໃຈ ເທົ່າກັບໃນໄລຍະນັ້ນ. ເບິ່ງຄືຈິ່ງວ່າເພິ່ນຫນຸ່ມກວ່າອາຍຸຊາວສາມສິບປີ. ເພິ່ນຂຽນ, ແປ, ພົບປະກັບສະມາຊິກພັກ, ຄົນຕິດຕໍ່, ໃກ້ຊິດຕິດແທດກັບປະຊາຊົນ ທ້ອງ

ຖິ່ນ, ກະໂຕເພິ່ນເອງໄດ້ເອົາໃຈໃສ່ນຳວຽກງານປະຈຳວັນ. ທຸກໆເຊົ້າ ເພິ່ນມັກຖາມສະຫາຍຢູ່ອ້ອມຂ້າງວ່າ ໃຜໄດ້ເຮັດຫຍັງແດ່. ໃຜບໍ່ມີວຽກເຮັດເພິ່ນຊອກວຽກ ໃຫ້ເຮັດຢ່າງທ່ວງທັນເວລາ, ລວມທັງວຽກທີ່ຄົນຈຳນວນຫນຶ່ງເຫັນວ່າເປັນວຽກ ມະຍິກມະຍ່ອຍເຊັ່ນຫຍິບເກີບ, ຫຍິບໂສ້ງເສື້ອເປັນຕົ້ນ. ທຸກຄົນທີ່ເຮັດວຽກຮ່ວມກັບເພິ່ນໃນເວລາດັ່ງກ່າວ ລ້ວນແຕ່ຮັບຮູ້ຄວາມປີຊາສາມາດໃນການນຳພາ ແລະ ຈັດຕັ້ງຂອງເພິ່ນ ຊຶ່ງມັນສະແດງອອກຢ່າງຈະແຈ້ງໃນເວລານາທີທຳອິດເມື່ອປັ່ງບາດຕີນລົງເທິງແຜ່ນດິນຂອງປະເທດຊາດ ແລະ ເຊັ່ນດຽວກັນກັບຄຸນສົມບັດອັນດີເລີດທີ່ມີຢູ່ແລ້ວຂອງເພິ່ນຄື ການອຸທິດຕົນເພື່ອວຽກງານ, ນ້ຳໃຈຮັບຜິດຊອບສູງທີ່ສຸດຕໍ່ຫນ້າທີ່, ຄວາມສາມາດໃນການແກ້ໄຂບັນຫາທັນການ, ຄວາມເປັນເຈົ້າການໃນວຽກງານ,ຄວາມງ່າຍດາຍ ໃນການພົວພັນກັບສະຫາຍໃນພັກ, ແຕ່ໃນຂະນະດຽວກັນເພິ່ນຊ້ຳພັດເປັນຄົນເຂັ້ມງວດຕໍ່ ,ພວກເຂົາເຈົ້າ. ເພິ່ນຕິດຕໍ່ພົວພັນຢ່າງໃກ້ຊິດກັບປະຊາຊົນທ້ອງຖິ່ນ ແລະ ດຳເນີນວຽກງານ ຂົນຂວາຍໃນຫມູ່ພວກເຂົາເຈົ້າຢ່າງມີເປົ້າຫມາຍ. ສະຫລຸບແລ້ວ, ຫວຽນອາຍກວັກ ມີຄຸນສົມບັດຄົບຖ້ວນຂອງຜູ້ນຳພາພັກຄົນຫນຶ່ງ ຊຶ່ງໃນວັນນີ້ພວກເຮົາມັກເວົ້າວ່າ ແບບແຜນເຮັດວຽກແບບເລນິນ.

໒

ການປ່ຽນແປງຢ່າງຮຸນແຮງ ໃນການຂະຫຍາຍຕົວຂອງສະພາວະການດ້ານການເມືອງຢູ່ຫວຽດນາມ ແລະ ຢູ່ອ້ອມຂ້າງຫວຽດນາມໄດ້ຊຸ້ໃຫ້ພັກກອມມູນິດອິນດູຈີນ ມອງເຫັນຫນ້າທີ່ອັນໃຫມ່ທີ່ຫຍຸ້ງຍາກສັບສົນ. ພາຍຫລັງທີ່ຝະລັ່ງຍອມຈຳນົນແລ້ວ, ພາກສ່ວນນິຍົມຟາດຊິດຜູ້ເປັນຝ່າຍສະຫນັບສະຫນູນລະບອບຫຸ່ນ ວິຊີ ກໍ່ຂຶ້ນກຳອຳນາດປົກຄອງຢູ່ອິນດູຈີນ. ແຕ່ວ່າ ໄພອັນຕະລາຍທີ່ຮ້າຍແຮງກວ່າອີກຈາກພາກເຫນືອ ໄດ້ມາບຂູ່ອິນດູຈີນ. ໃນເດືອນພຶດສະພາປີ ໑໙໔໐ ພວກຂຸນເສິກຍີ່ປຸ່ນໄດ້ບຸກຍຶດເອົາພາກໃຕ້ຈີນ ແລະ ມຸ່ງຫນ້າລົງມາຮອດຊາຍແດນຫວຽດນາມ. ຍ້ອນວ່າຝະລັ່ງບໍ່ແມ່ນ ມະຫາອຳນາດອີກແລ້ວສະນັ້ນພວກຂຸນເສິກຍີ່ປຸ່ນຈຶ່ງທວງໃຫ້ອຳນາດປົກຄອງເມືອງຂຶ້ນຝ່າຍ ວິຊີ ຕ້ອງ ປະຕິບັດຕາມນະໂຍບາຍຮຸກຮານຂອງພວກເຂົາ. ໃນເດືອນສິງຫາ ປີ ໑໙໔໐ ສັນຍາ ການ

ເມືອງລະຫວ່າງລັດຖະບານວິຊີ ແລະ ລັດຖະບານຍີ່ປຸ່ນໄດ້ຖືກເຊັນກັນ. ອີງຕາມສັນຍາດັ່ງກ່າວ ລັດຖະບານວິຊີຮັບຮູ້ວ່າຍີ່ປຸ່ນພາກຕາເວັນອອກໄກ ແມ່ນປະເທດແຫ່ງອາທິດຊູໄຫມ່ "ທ່າເຫນືອກວ່າເພິ່ນ" ແລະ ຍອມມອບອະພິສິດດ້ານການທະຫານຢູ່ອິນດູຈີນໃຫ້ເຂົາ.

ໂດຍບໍ່ພໍໃຈນຳສັນຍາດັ່ງກ່າວ ເດືອນກັນຍາ ປີ ໑໙໔໐ ພວກຂຸນເສິກຍີ່ປຸ່ນເລີ່ມແຊກແຊງໂດຍກົງເຂົ້າອິນດູຈີນ. ພວກເຂົາບຸກຍຶດເປັນລວດດຽວເອົາຕົວເມືອງ ຂອງຫວຽດນາມທີ່ຢູ່ໃກ້ຊາຍແດນຫວຽດນາມ-ຈີນ, ຍົກພົນຂຶ້ນບົກທີ່ທ່າເຮືອໄຮຟອງ. ໄລຍະຕໍ່ໄປ ພວກຂຸນເສິກຍີ່ປຸ່ນສວຍໃຊ້ສະພາບອ່ອນເພຍຂອງອຳນາດປົກຄອງວິຊີ ເຊິ່ງຕ້ອງຍອມຜ່ອນສັ້ນຜ່ອນຍາວຢ່າງລຽນຕິດນັ້ນ ທຳການສືບຕໍ່ "ແຜ່ນອຳນາດແບບສັນຕິ" ຢູ່ອິນດູຈີນ. ໃນຕອນທ້າຍປີ ໑໙໔໑ ເມື່ອຍີ່ປຸ່ນໂຈມຕີທ່າເຮືອເຈີນເຈົາ ແລະ ເລີ່ມກໍ່ສົງຄາມຢູ່ໃນເຂດມະຫາສະຫມຸດປາຊີຟິກ, ທົ່ວແຫລມອິນດູຈີນ ຖືກກອງທະຫານຍີ່ປຸ່ນເຂົ້າບຸກຍຶດ ແລະ ຖືກຫັນປ່ຽນເປັນແປ້ນຢັນການທະຫານໃຫ້ແກ່ພຶດຕິກຳຮຸກຮານ ຕາມບັນດາປະເທດຕ່າງໆຢູ່ອາຊີອາຄະເນ. ຫລັງຈາກທີ່ໄດ້ເຂົ້າຄວບຄຸມອິນດູຈີນແລ້ວ ພວກຮຸກຮານຍີ່ປຸ່ນຍັງຄົງຮັກສາກົງຈັກລ່າເມືອງຂຶ້ນຝະລັ່ງໄວ້ ຊຶ່ງເບິ່ງທາງດ້ານຮູບການແລ້ວແມ່ນ"ການແບ່ງປັນອຳນາດ" ກັບພວກຍີ່ປຸ່ນ. ດັ່ງນັ້ນປະຊາຊົນຫວຽດນາມ ຈຶ່ງຕົກຢູ່ໃນສະພາບຖືກກົດຂີ່ສອງຊັ້ນໃນເວລາດຽວກັນ: ພວກຂຸນເສິກຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝະລັ່ງ.

ເພື່ອຕອບໂຕ້ຕໍ່ການຮຸກຮານຂອງພວກຂຸນເສິກຍີ່ປຸ່ນ ແລະ ນະໂຍບາຍ ປະນີປະນອມຂອງລັດຖະບານວິຊີຢູ່ຫວຽດນາມ, ປະຊາຊົນຜູ້ຮັກຊາດໄດ້ທຳການລຸກຮືຂຶ້ນປະກອບອາວຸດຫລາຍຄັ້ງ. ການລຸກຮືຂຶ້ນຢູ່ນາມກີ ໃນວັນທີ ໒໓ ເດືອນພະຈິກ ປີ ໑໙໔໐ ມີຜົນສະທ້ອນອັນຮ້າຍແຮງເປັນພິເສດ.

ເງື່ອນໄຂເພື່ອຂະຫຍາຍການລຸກຮືຂຶ້ນປະກອບອາວຸດຂອງມະຫາຊົນໃນໄລຍະນັ້ນຍັງບໍ່ອຳນວຍໃຫ້, ສະນັ້ນ ກອງປະຊຸມຄົບຄະນະຂອງສູນກາງພັກກອມມູນິດອິນດູຈີນ ຄັ້ງທີ 7 ທີ່ຈັດຂຶ້ນໃນທ້າຍເດືອນຕຸລາປີ ໑໙໔໐ ຢູ່ຫວຽດນາມພາກເຫນືອ ຈຶ່ງບໍ່ເຫັນດີເຫັນພ້ອມນຳການຕົກລົງຂອງອົງຄະນະພັກຂອງນາມກີ ກ່ຽວກັບການກ້າວໄປສູ່ ການລຸກຮືຂຶ້ນປະກອບອາວຸດໂດຍຖືວ່າການລຸກຮືຂຶ້ນເທື່ອນີ້ແມ່ນບໍ່ເຫມາະສົມກັບເວລາ ແລະ ບໍ່ແທດເຫມາະກັບສະພາບພາວະວິໄສທົ່ວປະເທດ. ກອງປະຊຸມຄົບຄະນະຫັນທິດທາງ ການເຄື່ອນໄຫວຂອງພັກໄປໃນທາງປົກປັກຮັກສາ ແລະ ປັບປຸງກຳລັງປະຕິວັດ ໃຫ້ເຂັ້ມແຂງ

ຂຶ້ນກວ່າເກົ່າ, ກໍ່ສ້າງ ແລະ ເປີດກວ້າງທີ່ໜັ້ນກອງຫລອນ, ກະກຽມລູກຮື້ອນໃນຂອບ ເຂດທົ່ວປະເທດ.

ແຕ່ວ່າມະຕິຕົກລົງຂອງກອງປະຊຸມຄົບຄະນະບໍ່ໄດ້ໄປຮອດຄະນະນຳຂອງ ອົງຄະ ນະພັກນາມກົ. ຜູ້ຕາງໜ້າອົງຄະນະພັກນາມກົ ທີ່ມາເຂົ້າຮ່ວມກອງປະຊຸມຄົບຄະນະ ພໍ ແຕ່ກັບຄືນໄປຮອດໄຊງ່ອນກໍຖືກຈັບ. ຂະນະດຽວກັນ ກ່ອນທີ່ການລູກຮື້ອນຈະເກີດຂຶ້ນ ບໍ່ ເທົ່າໃດວັນ ພວກນັກສືບສອດແນມຝະລັ່ງກໍ່ຈັບໄດ້ເອກະສານບອກວັນເວລາທີ່ຈະລົງມືລູກ ຮື້ອນ. ບັນດາຜູ້ນຳພາຫລາຍຄົນຖືກຈັບ. ກ່ອນມື້ລູກຮື້ອນ ພົນທະຫານທີ່ເປັນໃຈນຳການ ປະຕິວັດກໍຖືກພວກຝະລັ່ງປົດອາວຸດ ແລະ ຖືກຄຸມຕົວໄວ້ຢູ່ກັບຄ້າຍ. ເຖິງວ່າ ເປັນແນວ ນັ້ນກໍຕາມ ການລູກຮື້ອນກໍຍັງເກີດຂຶ້ນຖືກກັບເວລາທີ່ກຳນົດໄວ້. ເຖິງວ່າ ການລູກຮື້ອນ ຍາດເອົາໄຊຊະນະອັນຍິ່ງໃຫຍ່ໃນເບື້ອງຕົ້ນມາໄດ້ເຊັ່ນໃນບາງເຂດ ອົງການ ແຫ່ງອຳ ນາດຂອງປະຊາຊົນໄດ້ສ້າງຖືກຕັ້ງຂຶ້ນ ແລະ ຄົງຕົວເກືອບສອງເດືອນກໍຕາມ, ຈາກນັ້ນ ບໍ່ດົນ ການລູກຮື້ອນກໍຖືກປາບປາມຢ່າງໂຫດຮ້າຍທາລຸນກວ່າວັນແຫ່ງການປາບປາມ ໃນ ປີ ໑໙໓໐–໑໙໓໑. ຄົນຮ້ອຍກວ່າຄົນຖືກປະຫານຊີວິດ ໃນຈຳນວນນັ້ນມີຜູ້ນຳທີ່ມີ ຊື່ສຽງ ຂອງຂະບວນການກອມມູນິດຫວຽດນາມຮ່ວມຢູ່ດ້ວຍ.

ໃນຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍຈາກການປາບປາມ ມີສະຫາຍ ເລຮົ່ງຟອງເລ ຂາທິການຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ແລະ ນາງ ມິງຄາຍ, ເລ ຂາຄະນະພັກນະຄອນໄຊງ່ອນ. ພວກເຂົາແມ່ນເພື່ອນຮ່ວມຮົບ, ແມ່ນລູກສິດ ຜູ້ດີເດັ່ນ ຂອງຫງວຽນອາຍກວັກ. ເລຮົ່ງຟອງຖືກຈັບແຕ່ປີ ໑໙໓໙ ຍ້ອນຄົນທໍລະຍົດຜູ້ໜຶ່ງ. ແຕ່ ວ່າເຈົ້າໜ້າທີ່ຕຳຫລວດບໍ່ມີຫລັກຖານພຽງພໍເພື່ອສົ່ງເລຮົ່ງຟອງ ຊຶ່ງເປັນນັກເຄື່ອນໄຫວ ໃຕ້ດິນທີ່ຄ່ອງແຄ້ວ ໄປສູ່ຫລັກປະຫານ. "ນັກໂທດອັນຕະລາຍ" ຄົນນີ້ຖືກສົ່ງຕົວເຂົ້າຄຸກ ດ້ວຍເຫດຜົນທີ່ວ່າບັດປະຈຳຕົວປອມ. ພວກເພັດຊະຄາດໄດ້ລໍຄອຍໂອກາດທີ່ຈະລົງມືປະ ຫານຊີວິດນັກຮົບປະຕິວັດຄົນນີ້ຢ່າງເດັດຂາດ ແລະ ໂອກາດດີຈຶ່ງຊູ້ຄາຍຄືວ່າມາຮອດມາ ເຖິງ. ໃນຊ່ວງໄລຍະກະກຽມການລູກຮື້ອນຢູ່ທີ່ນາມກົ ນາງມິງຄາຍຕົກເຂົ້າ ໃນແຮ້ວ ຂອງພວກນັກສືບສອດແນມ. ຢູ່ໃນຄຸກສູນກາງໄຊງ່ອນ ການພົບພໍ້ກັນເທື່ອສຸດທ້າຍ ຂອງ ຄູ່ຜົວເມຍໜຸ່ມໄດ້ຈັດຂຶ້ນເພື່ອໃຫ້ສອບປາກຄຳ.

ເບິ່ງຄືວ່າເມື່ອບໍ່ດົນມານີ້ເອງ ພວກເຂົາເກາະແຂນກັນຢ່າງເລາະຫລິ້ນຢູ່ ແຄມແມ່ ນ້ຳມີດສະກູ, ຟັງສຽງໂມງຢູ່ວັງກະແຮັມແລັງດັງບາດຍາວໆຢູ່ເທິງສະໜາມແດງ.ສ່ວນ

ເວລານີ້ຖືກໃສ່ກັບມືກັບຕີນ, ພວກເຂົາຢືນປິ່ນໜ້າໃສ່ກັນໃນຫ້ອງຂັງ ຫາຍໃຈຟົດ ຍອມຖືກຈັບຖາມ. ເຖິງແມ່ນວ່າເຂົາເຈົ້າອອນເພຍຍອມຖືກທໍລະມານກໍຕາມ ແຕ່ເຂົາ ທັງສອງຄົນລ້ວນແຕ່ບໍ່ສະແດງອອກດ້ວຍຄວາມເວົ້າ ແລະ ດ້ວຍແສງຕາວ່າ ພວກເຂົາຮູ້ຈັກມັກແກ່ວນກັນ. ໜຶ່ງໃນສອງຄົນ ຕ້ອງມີຊີວິດຢູ່, ມີຊີວິດເພື່ອພັກ, ເພື່ອພາລະກິດປະຕິວັດ ແລະ ມີຊີວິດເພື່ອລ້ຽງດູລູກສາວນ້ອຍຜູ້ໜ້າຮັກທີ່ຫາກໍເກີດໃໝ່ໄດ້ໜຶ່ງປີກ່ອນ ວັນສະໜຍົດສະໜຍອງດັ່ງກ່າວ. ເພື່ອເປັນທີ່ລະລຶກແກ່ດິນແດນໂຊວຽດ ສອງຜົວເມຍ ຕັ້ງຊື່ລູກສາວວ່າ ຮົ່ງ ມິງ (ອະລຸນແດງ).

ວັນທີ ໒໔ ເດືອນພຶດສະພາ ປີ ໑໙໔໑ ມິງຄາຍ ໄດ້ຖືກສັດຕູນຳຕົວໄປຍິງ ຢູ່ເດີ່ນລູກ ພ້ອມກັບກຳມະການຜູ້ອື່ນໆຂອງຄະນະບໍລິຫານງານສູນກາງພັກກອມມູນິດ ອິນດູຈີນ ເຊິ່ງໄດ້ແກ່ ຮ່າຮຸຍເຕີບ, ຫງວຽນວັນກື, ຟານດັງລືວ, ຫວໍວັນເຕີນ. ນັກກອມມູນິດສົມຊີວິດໂດຍບໍ່ຍອມຈຳນົນ. ກ່ອນຈະຖືກຍິງພວກເຂົາເວົ້າຄັ້ງສຸດທ້າຍວ່າ "ພັກກອມມູນິດອິນດູຈີນໝັ້ນຍືນ !", "ສະຫະພາບໂຊວຽດໝັ້ນຍືນ !".

ເທິງຝາຫ້ອງທີ່ຂັງມິງຄາຍມີຂໍ້ຄວາມໄວ້ວ່າ: "ຂ້ອຍບໍ່ກັງວົນຫຍັງ. ນຳໂຕຂ້ອຍ. ທຸກຄວາມນຶກຄິດຂອງຂ້ອຍແນ່ນແນໃສ່ເຮັດແນວໃດກູ້ເອົາພັກ". ນັກກອມມູນິດຍິງຜູ້ອາດຫານ ທີ່ຖືກຕັດຂາດຈາກໂລກພາຍນອກ ແລະ ກຳລັງລໍຄອຍຄວາມຕາຍ ໄດ້ຮຽກຮ້ອງມາເພື່ອຮ່ວມຮົບ ແລະ ສະຫາຍຕົນວ່າ ຕ້ອງກູ້ເອົາພັກ ແລະ ປັບປຸງພັກ.

ເລຮົ່ງຟອງມີຊີວິດຢູ່ອີກບໍ່ດົນ ພາຍຫລັງທີ່ມິງຄາຍ ເພື່ອນຍິງຮ່ວມຮົບເສຍ ຊີວິດໄປແລ້ວ. ພວກລ່າເມືອງຂຶ້ນໄດ້ຍ້າຍເລຮົ່ງຟອງອອກຈາກຄຸກໄຊງ່ອນໄປຂັງໄວ້ຢູ່ເກາະນົລະມະປູໂລ ໂກນດາວ ຊຶ່ງເປັນບ່ອນກັກຂັງຜູ້ເຂົ້າຮ່ວມການລຸກຮື້ຂຶ້ນເປັນຮ້ອຍໆຄົນ . ພວກເຂົາຂັງເລຮົ່ງຟອງ ໄວ້ໃນ "ຄອກເສືອ" ຂຽນຕີທໍລະມານ, ທຸບຕີເຕະຖີບ, ຜູກມັດ, ອື່ນໆເພື່ອ ເພື່ອໃຫ້ເຜີຍຄວາມລັບ, ຫລັງຈາກທີ່ເພິ່ນຖືກຈຳຄຸກຢູ່ບ່ອນນີ້ໄດ້ຫລາຍເດືອນ ເລຮົ່ງຟອງເປັນພະຍາດປອດແຫງຢ່າງກະທັນຫັນ. ວັນທີ ๖ ເດືອນກັນຍາ ປີ ໑໙໔໒ ເລຮົ່ງຟອງ ກໍໄດ້ເຖິງແກ່ມໍລະນະກຳ. ເປືອງແບັດມາຍ ນັກຮຽນຜູ້ໜຶ່ງທີ່ຮຽນຈົບມະຫາວິທະຍາໄລກອມມູນິດສຳລັບຊາວຜູ້ອອກແຮງງານພາກຕາເວັນອອກ ຊຶ່ງຖືກຈຳຄຸກຢູ່ໃນຫ້ອງແປະກັນກັບເລຮົ່ງຟອງ ເປັນຜູ້ໜຶ່ງທີ່ໄດ້ເຫັນການຕາຍຂອງເລຮົ່ງຟອງກັບຕາ. ຄຳເວົ້າສຸດທ້າຍຂອງເລຮົ່ງຟອງ ທີ່ຝາກໄວ້ນຳສະຫາຍຜູ້ນີ້ຄື:

"ຂໍໃຫ້ສະຫາຍເວົ້າໃຫ້ພັກຟັງວ່າ: ຈົນຮອດລົມຫາຍໃຈສຸດທ້າຍ ເລຮົ່ງຟອງ ກໍ

ຍັງເຊື່ອໝັ້ນຢ່າງຕາຍໃຈວ່າ ເວລານາທີແຫ່ງໄຊຊະນະຂອງພາລະກິດປະຕິວັດ ຂອງ ພວກເຮົາຕ້ອງມາຮອດຢ່າງແນ່ນອນ".

ເຖິງຢ່າງໃດກໍດີ ພັກກໍຍັງມີຊີວິດ, ຍັງສືບຕໍ່ເຄື່ອນໄຫວ. ແຕ່ເພື່ອເຕົ້າໂຮມກຳລັງ ເພື່ອເຮັດໃຫ້ຂະບວນການປົດປ່ອຍຊາດໄປເຖິງບ່ອນພຸ່ງຂຶ້ນ ກໍຕ້ອງມີຍຸດໂທບາຍໃໝ່ອັນທີ່ແທດເໝາະກັບສະພາບແວດລ້ອມທາງການເມືອງ ທີ່ໄດ້ປ່ຽນແປງ ຢ່າງຂາດຂັ້ນ. ໂຄງຮ່າງຂອງຍຸດໂທບາຍໃໝ່ໄດ້ຖືກກຳນົດອອກຢູ່ກອງປະຊຸມຄົບຄະນະຄັ້ງທີ 6 ຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຊຶ່ງເປີດປະຊຸມລັບໃນເດືອນ ພະຈິກປີ ໑໙໓໙ ຢູ່ໄຊງ່ອນ. ກອງປະຊຸມຕົກລົງໃຫ້ລົງມືສ້າງຕັ້ງແນວໂຮມເອກະພາບແຫ່ງຊາດ ຕ້ານຈັກກະພັດ, ໂດຍຖືເອົາການປະຕິບັດໜ້າທີ່ປົດປ່ອຍຊາດ ຂອງການປະຕິວັດເປັນອັນດັບໜຶ່ງ. ຄຳຂວັນຍຶດເອົາທີ່ດິນ ໄຮ່ນາ ທັງໝົດຂອງເຈົ້າທີ່ດິນມາແບ່ງປັນໃຫ້ຊາວນາໄດ້ຖືກໂຈະໄວ້ ແລະປ່ຽນມາເປັນຄຳຂວັນຈຳກັດກວ່າຄື ຍຶດເອົາທີ່ດິນ ປູກຝັງຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ເຈົ້າທີ່ດິນຜູ້ທໍລະຍົດ. ກອງປະຊຸມຄົບຄະນະ ຂອງສູນກາງພັກ ຍັງໄດ້ຍົກເລີກຄຳຂວັນ ກ່ຽວກັບການສ້າງຕັ້ງລັດຖະບານຂອງ "ສະພາໂຊວຽດຜູ້ແທນກຳມະກອນ ຊາວນາ ທະຫານ" ແລະ ປ່ຽນແທນຄຳຂວັນດັ່ງກ່າວ ດ້ວຍຄຳຮຽກຮ້ອງໃຫ້ "ສ້າງຕັ້ງລັດຖະບານຂອງສະຫະພັນ ສາທາລະນະລັດ ປະຊາທິປະໄຕອິນດູຈີນ" ໂດຍຖືວ່ານັ້ນແມ່ນ"ຮູບການລັດຖະບານລວມສຳລັບທຸກຊັ້ນຄົນ ທີ່ເຂົ້າຮ່ວມໃນຂະບວນການປົດປ່ອຍຊາດ, ລວມທັງສຳລັບພາກສ່ວນໜຶ່ງຂອງຊົນຊັ້ນນາຍທຶນ ຊຶ່ງຍັງ ສາມາດໄປນຳມວນໝູ່ມະຫາຊົນໄດ້ໃນໄລຍະໃດໜຶ່ງ". ໃນກອງປະຊຸມຄັ້ງນີ້ ຍັງມີ ເຫດການສຳຄັນສຳລັບພັກ ອັນໜຶ່ງອີກ ນັ້ນກໍຄືການທີ່ກອງປະຊຸມຄົບຄະນະສູນກາງພັກເລືອກຕັ້ງເອົາສະຫາຍເລຢວນ ໜຶ່ງໃນບັນດາພະນັກງານນຳຜູ້ໜຸ່ມນ້ອຍຂອງ ອົງຄະນະພັກນາມກີ ເຂົ້າໃນຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ.

ມະຕິຂອງກອງປະຊຸມຄົບຄະນະສູນກາງພັກ ໄດ້ເປີດໂອກາດອັນຕົວຈິງ ສຳລັບການສ້າງຕັ້ງແນວໂຮມປົດປ່ອຍຊາດອັນກວ້າງຂວາງ ພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນ ແລະ ພັກກອມມູນິດອິນດູຈີນ. ແຕ່ວ່າ ໃນຕົວຈິງ ແນວທາງດັ່ງກ່າວ ຈະປະຕິບັດໃຫ້ປະກົດເປັນຈິງໄດ້ ກໍຕໍ່ເມື່ອຫງວຽນອາຍກວັກ ແລະ ສະຫາຍອື່ນໆ ໃນຄະນະປະ

18–546

ຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນກັບຄືນຫວຽດນາມ.

ທັນທີ ທີ່ຫວຽນອາຍກວັກກັບຄືນມາປະເທດຊາດ ເພິ່ນໄດ້ດຳເນີນການກະກຽມ ຮຽກໂຮມກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ . ເຊັ່ນດຽວກັນກັບຢູ່ຮົງກົງ ໃນປີ ໑໙໓໐ ນັ້ນ ເພິ່ນ ມີຖານະເປັນຜູ້ຕາງໜ້າຂອງສາກົນກອມມູນິດ. ສົງຄາມໂລກຄັ້ງທີສອງລະເບີດຂຶ້ນ ອັນໄດ້ເຮັດໃຫ້ການເຄື່ອນໄຫວຂອງບັນດາພະແນກຢູ່ຕ່າງປະເທດທີ່ຂຶ້ນກັບສາກົນກອມມູນິດ ທີ່ຢູ່ທັງພາກຕາເວັນຕົກ ລວມທັງພາກຕາເວັນອອກ ຂາດເປັນບັ້ນເປັນຕອນ. ດົນນານມາແລ້ວ ຫວຽນອາຍກວັກ ບໍ່ໄດ້ຕິດຕໍ່ກັບຄະນະປະທານຄະນະບໍລິຫານງານສາກົນກອມມູນິດ. ແຕ່ເພິ່ນກໍຍັງຈົງຮັກພັກດີຕໍ່ພະລາດອນພາບສາກົນ ຂອງຊາວກອມມູນິດຢູ່ໃນໂລກ. ເພິ່ນຍັງຍຶດໝັ້ນ ຢ່າງສະເໝີຕົ້ນສະເໝີປາຍວ່າ ຕົນແມ່ນຜູ້ຕາງໜ້າທີ່ມີອຳນາດເຕັມ ແລະ ເປັນຜູ້ຕາງໜ້າ ຂອງສາກົນກອມມູນິດ ທີ່ເຄື່ອນໄຫວຢູ່ເຂດພູຜາປ່າຕຶບກາວບັງແຫ່ງນີ້.

ວັນທີ ໑໐ ເດືອນພຶດສະພາປີ ໑໙໔໑ ກອງປະຊຸມຄົບຄະນະຄັ້ງທີ ໘ ຂອງ ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນໄດ້ຖືກເປີດຂຶ້ນ ຢູ່ໃນເຮືອນຮ້ານຫລັງໜຶ່ງຕັ້ງຢູ່ໃນປ່າຕຶບ, ບໍ່ຫ່າງຈາກປາກບໍ່ພໍເທົ່າໃດ. ຢູ່ໃນບັນດາສະມາຊິກຄະນະ ບໍລິຫານງານສູນກາງພັກນັ້ນ ມີຜູ້ແທນຂອງອົງຄະນະພັກນາມກໍໜ້ອຍທີ່ສຸດ. ບັນດາຜູ້ນຳສ່ວນໃຫຍ່ຂອງຄະນະພັກໄດ້ເສຍຊີວິດ, ສ່ວນບັນດາສະຫາຍທີ່ຍັງມີຊີວິດຢູ່ ເຊິ່ງໃນນັ້ນມີ ສະຫາຍເລຢວນ ແມ່ນຖືກກັກຂັງໄວ້ໃນເກາະມໍລະນະປູໂລໂກນດ້າວ ຫລືໃນຄຸກອື່ນໆ.

ຫວຽນອາຍກວັກກ່າວເປີດກອງປະຊຸມ ແລະ ນຳພາກອງປະຊຸມ. ເພິ່ນມີອິດທິພົນສູງພາຍໃນພັກກໍຄືໃນໝູ່ຜູ້ຮັກຊາດອີກດ້ວຍ. ໃນຈຳນວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ແລະ ໄດ້ພົບພໍ້ເປັນເທື່ອທຳອິດກັບຜູ້ສ້າງຕັ້ງພັກກອມມູນິດອິນດູຈີນນັ້ນ ມີສະຫາຍຮ່ວາງກວັກຫວຽດ ນັກກອມມູນິດຜູ້ໜຸ່ມນ້ອຍ. ເມື່ອຖືກແນະນຳໃຫ້ຮູ້ຈັກກັບຜູ້ຊາຍຈ່ອຍໆ ອາຍຸກາງຄົນ ໂດຍເວົ້າວ່າ ບຸກຄົນຜູ້ນີ້ແມ່ນ "ສະຫາຍ ຫວຽນອາຍກວັກ ຜູ້ຕາງໜ້າສາກົນກອມມູນິດ" ຮ່ວາງກວັກຫວຽດພັດຕື່ນເຕັ້ນ ຈົນເຖິງຂັ້ນວ່າ ໄດ້ແຕ່ຈັບມືເພິ່ນ ໄວ້ແໜ້ນ ແຕ່ຫາກກ່າວຕອບຄຳຖາມສະບາຍສຸກທຸກຂອງເພິ່ນບໍ່ອອກຈັກຄວາມ.

ຮ່ວາງກວັກຫວຽດໄດ້ຫວນຄືນວ່າ "ຫວຽນອາຍກວັກ ! ຊື່ນີ້ເປັນຄື ຄົນຫູງສຳລັບສະມາຊິກພັກທັງໝົດ ສຳລັບປະຊາຊົນຫວຽດນາມທຸກໆຄົນ ຜູ້ທີ່ສະໜັບສະໜູນການປະຕິວັດ. ເມື່ອພວກຂ້ອຍນັກໂທດຂອງຄຸກປູໂລໂກນດ້າວ ໄດ້ຮັບຂ່າວວ່າ ຫວຽນ

ອາຍກວັກ ຖືກຈັບຢູ່ຮົງກົງ ພວກຂ້ອຍໝົດທຸກຄົນລ້ວນແຕ່ເປັນຫ່ວງເປັນໄຍຫລາຍທີ່ສຸດ. ຫລັງຈາກທີ່ພວກຂ້ອຍຮູ້ວ່າ ອົງການຈັດຕັ້ງສາກົນເພື່ອໃຫ້ການຊ່ວຍເຫລືອ ນັກປະຕິວັດ ໄດ້ຊ່ວຍເພິ່ນໃຫ້ຫລຸດພົ້ນອອກຈາກມືຂອງນັກສືບສອດແນມອັງກິດແລ້ວ ພວກຂ້ອຍຕ່າງ ກໍຫາຍໃຈໂລ່ງດ້ວຍຄວາມປາບປື້ມດີໃຈ. ພາຍລູນມາ ອາຍນ້ອງເຄື່ອນໄຫວຢູ່ໃຕ້ດິນມັກ ເລົ່າຄືນກ່ຽວກັບສະຫາຍຫງວຽນອາຍກວັກ ດ້ວຍຄວາມຮັກແພງ ແລະ ຄວາມຍ້ອງຍໍ ຢູ່ ເລື້ອຍໆ, ໃນໝູ່ພວກເຮົາມີໜ້ອຍຄົນທີ່ເຊື່ອວ່າ ຈະມີໂອກາດໄດ້ພົບພໍ້ກັບເພິ່ນ..."

ກອງປະຊຸມຄົບຄະນະດຳເນີນໄປໄດ້ ໑໐ ວັນ. ບັນດາຜູ້ເຂົ້າຮ່ວມໃນ ກອງປະຊຸມຄົບຄະນະຄັ້ງນີ້ ໄດ້ໄຈ້ແຍກຢ່າງເລິກເຊິ່ງ ສາເຫດ ແລະ ຂະບວນວິວັດ ແຫ່ງການຂະຫຍາຍຕົວຂອງສົງຄາມໂລກຄັ້ງທີສອງ ແລະ ສະແດງຄວາມເຊື່ອໝັ້ນ ຢ່າງໜັກແໜ້ນວ່າ ສົງຄາມເດັດຂາດຈະຈົບສິ້ນລົງດ້ວຍຄວາມປະລາໄຊຢ່າງສິ້ນເຊີງຂອງ ລັດທິຟາດຊິດ.

ເມື່ອໄຈ້ແຍກສະຖານະການໂລກ ຫງວຽນອາຍກວັກເວົ້າວ່າ "ຫລັງຈາກ ທີ່ປະເທດເຢຍລະມັນຟາດຊິດໄດ້ຕີຊະນະປະເທດຝະລັ່ງ ແລະ ເຮັດໃຫ້ ເຄິ່ງໜຶ່ງຂອງ ທະວີບເອີລົບຕົກເປັນຂ້າທາດແລ້ວພວກຟາດຊິດກຳລັງກະກຽມບຸກໂຈມຕີເຂົ້າສະຫະພາບໂຊວຽດ ຊຶ່ງເປັນລັດຂອງພວກກຳມະກອນ-ຊາວນາລັດທຳອິດໃນໂລກ. ແຕ່ພວກເຮົາຊາວກອມມູນິດແຕ່ລະຄົນເຊື່ອໝັ້ນຢ່າງໜັກແໜ້ນວ່າ ມື້ທີ່ຮິດແລບຸກໂຈມຕີສະຫະພາບ ໂຊວຽດ ມັນຈະກາຍເປັນວັນເລີ່ມຕົ້ນແຫ່ງການພ່າຍແພ້ລັດທິຟາດຊິດເຢຍລະມັນ. ອາດເວົ້າໄດ້ດ້ວຍຄວາມເຊື່ອໝັ້ນວ່າ ຖ້າສົງຄາມຈັກກະພັດໂລກຄັ້ງທີໜຶ່ງນຳໄປສູ່ການ ສ້າງຕັ້ງສະຫະພາບໂຊວຽດ, ໃນດຽວນີ້ ຜົນທີ່ໄດ້ຮັບຈາກການພ່າຍແພ້ລັດທິຟາດຊິດນັ້ນຈະແມ່ນໄຊຊະນະຂອງການປະຕິວັດສັງຄົມນິຍົມຢູ່ຫລາຍປະເທດ".

ແນວຄິດດັ່ງກ່າວຂອງເພິ່ນໄດ້ສະແດງອອກໃນມະຕິຂອງກອງປະຊຸມຄົບຄະນະ.ຢູ່ໃນມະຕິຂອງກອງປະຊຸມຊີ້ອອກແຈ້ງວ່າ ການປະຕິວັດຫວຽດນາມ ແມ່ນພາກສ່ວນໜຶ່ງຂອງການປະຕິວັດໂລກ ແລະ ເປັນຝ່າຍຂະບວນການສາກົນຕ້ານຟາດຊິດ. ສະນັ້ນ ໃນຂະບວນວິວັດແຫ່ງການຂະຫຍາຍຕົວອັນຍາວນານຂອງຕົນ, ເປັນເທື່ອທຳອິດ ທີ່ໂຊກຊາຕາຂອງປະຊາຊົນຫວຽດນາມໃນໄລຍະປະຈຸບັນ ຕິດພັນໂດຍກົງກັບໂຊກຊາຕາ ຂອງສະຫະພາບໂຊວຽດ. ໄຊຊະນະຂອງການປະຕິວັດຫວຽດນາມ ຂຶ້ນຢ່າງເຕັມປ່ຽມກັບບັນຫາທີ່ວ່າ ບັນດາກຳລັງຕ້ານຟາດຊິດຈະຢືນຢັດຢູ່ໄດ້ຫລືບໍ່ ໃນການຕໍ່ສູ້ອັນໜັກໜ່ວງ ຕ້ານ

ກຸ່ມປະເທດທີ່ເປັນພັນທະມິດກັບຟາຊິດ.

ກອງປະຊຸມຄົບຄະນະຄັ້ງນີ້ ເຫັນດີນຳມະຕິຕົກລົງ ຂອງກອງປະຊຸມຄົບຄະນະຄັ້ງກ່ອນ ກ່ຽວກັບການຫັນປ່ຽນແນວທາງຍຸດໂທບາຍຂອງພັກ ກ່ຽວກັບການຍົກໜ້າທີ່ຕໍ່ສູ້ປົດປ່ອຍຊາດຂຶ້ນເປັນບັນຫາອັນດັບໜຶ່ງ.

ຫງວຽນອາຍກວັກ ເວົ້າຕື່ມອີກວ່າ : "ພຽງແຕ່ໃນຂອບເຂດສອງສາມເດືອນເທົ່ານັ້ນ ກໍເກີດມີການລຸກຮື້ຂຶ້ນເຖິງສາມຄັ້ງ. ການລຸກຮື້ຂຶ້ນທີ່ບັກເຊີນ ລະເບີດຂຶ້ນໃນເດືອນ ກັນຍາ ປີ ໑໙໔໐, ສອງເດືອນຈາກນັ້ນ ການລຸກຮື້ຂຶ້ນຢູ່ນາມກີ ແລະໃນເດືອນມັງກອນ ຂອງປີນີ້, ອາຍນອງພົນທະຫານບັກກີ ຢູ່ໂດລ້ວງ ແຂວງເງ້ອານ ກໍໄດ້ລຸກຂຶ້ນຕໍ່ສູ້ປະກອບອາວຸດ. ເຫດການດັ່ງກ່າວ ສະແດງຢ່າງຈະແຈ້ງ ໃຫ້ເຫັນວ່າປະຊາຊົນ ຜູ້ພິລະອາດຫານຂອງພວກເຮົາ ລ້ວນແຕ່ຄອຍໂອກາດ ເພື່ອຈັບອາວຸດ ລຸກຂຶ້ນຕໍ່ສູ້. ເວລານີ້ຍິ່ງກວ່າເວລາໃດໝົດ ປະຊາຊົນເຕັມໄປດ້ວຍການຕັດສິນໃຈຢ່າງເດັດດ່ຽວວ່າ ຈະປົດປ່ອຍ ປະເທດຊາດໃຫ້ໄດ້. ພວກເຮົາຕ້ອງຕີລາຄາຄວາມກະຕືລືລົ້ນແບບປະຕິວັດ ອັນບໍ່ມີຂອບເຂດດັ່ງກ່າວໃຫ້ຖືກຕ້ອງ ແລະ ຕ້ອງຮູ້ຈັກນຳໃຊ້ຄວາມກະຕືລືລົ້ນອັນນີ້ຢ່າງຄ່ອງແຄ້ວ. ໜ້າທີ່ຂອງພັກ ແມ່ນຕ້ອງເຕົ້າໂຮມກຸ່ມ ແລະ ຊຸ້ມຄົນທັງໝົດໃນສັງຄົມ ເຂົ້າຢູ່ອ້ອມຂ້າງຄັນທຸງຮັກຊາດ, ຕ້ອງເຕົ້າໂຮມທຸກໆກຳລັງປະຕິວັດຊາດ ເພື່ອຂັບໄລ່ໄທຕົວຝະລັ່ງ ຍີ່ປຸ່ນ ແລະ ເພື່ອຕໍ່ສູ້ກູ້ຊາດ ".

ມະຕິຕອນໜຶ່ງ ຂອງກອງປະຊຸມຄົບຄະນະສູນກາງພັກ ໄດ້ບົ່ງໄວ້ວ່າ ຄັນທຸງແຫ່ງການປົດປ່ອຍຊາດ ຕົກມາຢູ່ໃນກຳມືອັນເຂັ້ມແຂງ ຂອງພັກກອມມູນິດ ອິນດູຈີນເຊິ່ງຮຽກຮ້ອງໄປຍັງທຸກຄົນ ທີ່ເປັນຫ່ວງເປັນໃຍນຳໂຊກຊາຕາຂອງຊາດຫວຽດນາມຈົ່ງເຂົ້າຮ່ວມໃນຖັນແຖວຂອງນັກສູ້ຮົບ. ຢູ່ໃນມະຕິຍັງຊີ້ໃຫ້ເຫັນວ່າ " ໃນຊ່ວງໄລຍະນີ້ສິດຜົນປະໂຫຍດຂອງຊາດ ຕ້ອງໄປກ່ອນສິດຜົນປະໂຫຍດສ່ວນບຸກຄົນ, ຂອງຊົນຊັ້ນໃດໜຶ່ງ, ເພາະມັນໝາຍເຖິງຄວາມເປັນຄວາມຕາຍ ແລະ ການຄົງຕົວ ຂອງປະເທດຊາດ. ຖ້າບັນຫາປົດປ່ອຍຊາດຫາກບໍ່ໄດ້ຖືກແກ້ໄຂ, ຖ້າວ່າຊາດຍາດຄວາມເປັນເອກະລາດ ແລະ ອິດສະຫລະພາບບໍ່ໄດ້ ກໍໝາຍຄວາມວ່າ ບໍ່ພຽງແຕ່ ປະຊາຊົນບັນດາເຜົ່າທັງຊາດ ຕ້ອງຕົກເປັນຂ້າທາດຕະຫລອດການເທົ່ານັ້ນ ແຕ່ນັບທັງສິດຜົນປະໂຫຍດສ່ວນບຸກຄົນໃດໜຶ່ງ ຫລື ຂອງຊົນຊັ້ນໃດໜຶ່ງ ກໍຍັງຈະບໍ່ຖືກປະຕິບັດ ໃຫ້ປະກົດເປັນຈິງໄດ້.

ກ່ອນນັ້ນໜຶ່ງປີ ຫວູວຽນອາຍກວັກ ໄດ້ຍົກແນວຄິດກ່ຽວກັບຄວາມຈຳເປັນ ຕ້ອງກໍ່ສ້າງ ອົງການຈັດຕັ້ງ ມະຫາຊົນຮັກຊາດໜຶ່ງຂຶ້ນ. ໜ້າທີ່, ໂຄງປະກອບເຊັ່ນດຽວກັນກັບຊື່ຂອງອົງການນີ້ ຕ້ອງແມ່ນອົງການ ທີ່ມີລັກສະນະທົ່ວຊາດອັນກວ້າງຂວາງທີ່ສຸດ, ສ່ວນພັກກອມມູນິດ ຈະມີຖານະເປັນແກ່ນສານ ຊີ້ນຳນຳພາຂອງອົງການ ດັ່ງກ່າວນີ້. ໃນກອງປະຊຸມຄົບຄະນະສູນກາງພັກເທື່ອນີ້ ແນວຄິດດັ່ງກ່າວໄດ້ຖືກປະຕິບັດໃຫ້ປະກົດເປັນຈິງ. ພາຍຫລັງການຖົກຖຽງກັນ ແລະ ການພິຈາລະນາ ເປັນເວລາດົນນານ, ກອງປະຊຸມກໍ່ຊອກເຫັນຊື່ ອັນແທດເໝາະ ໃຫ້ແກ່ອົງການຈັດຕັ້ງໃໝ່. ມີບາງຄົນສະເໜີຂຶ້ນວ່າ "ສັນນິບາດຕໍ່ສູ້ ເພື່ອການຟື້ນຟູຊາດ" ແຕ່ກໍ່ຖືກປະຕິເສດຢ່າງເດັດຂາດ. ສັບດັ່ງກ່າວນີ້ ທີ່ເປັນຖ້ອຍຄຳອັນສັກກາລະບູຊາ ສຳລັບຄົນຫວຽດນາມທັງໝົດ ໄດ້ຖືກພວກສະໜັບສະໜູນ ຍີ່ປຸ່ນ ໃສ່ຮ້າຍປ້າຍສີແລ້ວ. ພວກນິຍົມຍີ່ປຸ່ນ ເອີ້ນການປ່ຽນແທນພວກລ່າເມືອງຂຶ້ນ ຝະລັ່ງ ດ້ວຍພວກຍຶດຄອງ ຍີ່ປຸ່ນນັ້ນວ່າ ເປັນການຟື້ນຟູຊາດ. ການໃຊ້ສັບ "ຕ້ານຈັກກະພັດ" ບໍ່ແທດເໝາະ ຄືກັນ ຍ້ອນວ່າ ສັບດັ່ງກ່າວມັນມີເນື້ອໃນອັນຮຸນແຮງທີ່ສຸດ ຖ້າເວົ້າກ່ຽວກັບ ເປົ້າໝາຍຊຶ່ງຊາວກອມມູນິດວາງອອກໃຫ້ແນວໂຮມແຫ່ງຊາດໃໝ່. ສຸດທ້າຍ ອົງການຈັດຕັ້ງໃໝ່ ຈຶ່ງມີຊື່ວ່າ " ສັນນິບາດ ເພື່ອຫວຽດນາມ ເອກະລາດ ". ຫວູວຽນ ອາຍກວັກ ສະເໜີຕັ້ງຊື່ຫຍໍ້ໃຫ້ອົງການ ຈັດຕັ້ງດັ່ງກ່າວ ເພື່ອໃຫ້ຟັງງ່າຍ ຈື່ງ່າຍ ດູດດຶງເອົາມະຫາຊົນໄດ້. ດັ່ງນັ້ນສັບ "ຫວຽດມິນ " ຈຶ່ງໄດ້ກຳເນີດຂຶ້ນ. ມັນແມ່ນສັບທີ່ສັ້ນກະທັດລັດ, ຊັດເຈນ ຄືສຽງປືນແຕກ ຊຶ່ງໃນຫລາຍປີໄດ້ດັງກ້ອງກັງວານ ຄືສຽງກອງດັງບາດທີ່ງ ຊວນໃຫ້ທຸກຄົນໂດດເຂົ້າຕໍ່ສູ້ປົດປ່ອຍຊາດ, ຊ້ຳພັດສາງຄວາມຢ້ານກົວໃຫ້ແກ່ພວກລ່າເມືອງຂຶ້ນ ແລະ ລູກມືຂອງພວກເຂົາ.

ອີງຕາມມະຕິຕົກລົງ ຂອງກອງປະຊຸມ ຄົບຄະນະສູນກາງພັກຄັ້ງນັ້ນ ອົງການຈັດຕັ້ງຮັກຊາດ ທີ່ຕ້ານຈັກກະພັດ ເຊິ່ງຢູ່ພາຍໃຕ້ການກວດກາຂອງພັກ ທັງເປັນຕົວແທນໃຫ້ແກ່ບັນດາຊັ້ນຄົນຕ່າງໆ ຂອງປະຊາຊົນນັ້ນ ຄື ກຳມະກອນ, ຊາວນາ, ຊາວໜຸ່ມ, ແມ່ຍິງ, ພົນທະຫານ, ພຸດທະສາສະນິກະຊົນ ຈຶ່ງຕັ້ງຊື່ວ່າ: "ສະມາຄົມຊາດ". ໂຄງການດຳເນີນງານຂອງຫວຽດມິນ ທີ່ຜ່ານກອງປະຊຸມ ຄົບຄະນະສູນກາງພັກ ໄດ້ເວົ້າແຈ້ງວ່າ ໂດຍຖືວ່າສິດຜົນປະໂຫຍດຂອງຊາດ ຢູ່ເໜືອສິ່ງອື່ນໝົດ ຫວຽດມິນກໍ່ຕຽມພ້ອມຮ່ວມມືກັບທຸກຄົນ ແລະ ທຸກອົງການຈັດຕັ້ງ, ຖ້າວ່າ "ພວກເຂົາ

ຈິງໃຈຢາກຕໍ່ສູ້ເພື່ອຂັບໄລ່ ຍີ່ປຸ່ນ ແລະ ຝະລັ່ງ ເພື່ອສ້າງເວັງປະເທດຫວຽດນາມເອກະລາດ ແລະ ອິດສະຫລະພາບ ". ເຫມືອນດັ່ງທີ່ເຫດການທີ່ເກີດຂຶ້ນໃນເວລາຕໍ່ມາໄດ້ຊີ້ໃຫ້ເຫັນແລ້ວວ່າ ໂຄງການການເມືອງຂອງຫວຽດມິນ ເຊິ່ງໄດ້ຖືກສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການ ທີ່ມີລັກສະນະປະຊາທິປະໄຕໂດຍທົ່ວໄປ, ນັບທັງຄຳນຶງເຖິງສິດຜົນປະໂຫຍດ ຂອງຈຸ້ມຈຸ້ມນາຍທຶນແຫ່ງຊາດ, ຕອບສະຫນອງຄວາມມຸ່ງມາດປາດຖະຫນາ ຂອງປະຊາຊົນຫລາຍຊັ້ນຄົນ. ໂຄງການການເມືອງດັ່ງກ່າວ ແມ່ນພື້ນຖານອັນແຫນ້ນແກ່ນ ເພື່ອເຕົ້າໂຮມທຸກຊັ້ນຄົນເຂົ້າໃນແນວໂຮມແຫ່ງຊາດ.

ບົນພື້ນຖານໄຈ້ແຍກສະຖານະການ ຢູ່ພາຍໃນປະເທດ ແລະ ໃນໂລກ ເປັນຄັ້ງທຳອິດ ທີ່ກອງປະຊຸມຄົບຄະນະສູນກາງ ຄັ້ງທີ 8 ໄດ້ຊີ້ໃຫ້ເຫັນວ່າ ໃນບັນດາເງື່ອນໄຂປະຈຸບັນ ການລຸກຮື້ຂຶ້ນປະກອບອາວຸດ ແມ່ນເສັ້ນທາງດຽວ ຊຶ່ງອາດນຳເອົາການປະຕິວັດໄປສູ່ໄຊຊະນະ. ມະຕິກົລງຊີ້ອອກວ່າ " ກະກຽມການລຸກຮື້ຂຶ້ນ ປະກອບອາວຸດ ແມ່ນຫນ້າທີ່ໃຈກາງຂອງທົ່ວພັກ ແລະ ທົ່ວປວງຊົນໃນໄລຍະນີ້ ". ອີງໃສ່ບົດຮຽນ ຂອງສະພາໂຊວຽດ ເງ່ຕິງ ແລະ ການລຸກຮື້ຂຶ້ນທີ່ບັກເຊີນ ແລະ ນາມກີພາຍໃຕ້ການນຳພາຂອງພັກ ກອງປະຊຸມໄດ້ວາງແນວທາງຍຸດໂທບາຍໃຫມ່ຂອງພັກໃນເວລາກະກຽມການລຸກຮື້ຂຶ້ນປະກອບອາວຸດຄື: ຂັ້ນທຳອິດກໍ່ສ້າງຖານທີ່ຫມັ້ນກອງຫລອນຢູ່ຫລາຍເຂດ ທີ່ມີເງື່ອນໄຂອຳນວຍໃຫ້; ຈາກນັ້ນ ແມ່ນການລຸກຮື້ຂຶ້ນປະກອບອາວຸດທີ່ມີຈຸດປະສົງຢາກຍາດເອົາອຳນາດຢູ່ຕາມເຂດຕ່າງໆ ກ່ອນອື່ນຫມົດ ແມ່ນຢູ່ເຂດ ທີ່ກອງທັບສັດຕູໄປເຖິງຍາກ, ສຸດທ້າຍ ເມື່ອໃດປະຖົມປັດໄຈພາວະວິໄສ ແລະ ອັດຕະວິໄສ ອັນຈຳເປັນໄດ້ເກີດຂຶ້ນແລ້ວ, ລວມທັງຢູ່ບົນເວທີສາກົນ ເມື່ອນັ້ນ ກໍ່ກ້າວໄປສູ່ການລຸກຮື້ຂຶ້ນປະກອບອາວຸດ ໂດຍທົ່ວໄປ.

ບັນດານັກປະຫວັດສາດຫວຽດນາມ ຕີລາຄາມະຕິ ອັນສຳຄັນດັ່ງກ່າວນີ້ ຂອງກອງປະຊຸມຄົບຄະນະສູນກາງພັກຄັ້ງທີ 8 ວ່າເປັນການຜັນຂະຫຍາຍທິດສະດີ ມາກ-ເລນິນ ກ່ຽວກັບການລຸກຮື້ຂຶ້ນປະກອບອາວຸດ ຢ່າງມີຫົວຄິດປະດິດສ້າງ ໃຫ້ແທດເຫມາະກັບສະພາບຕົວຈິງຂອງປະເທດຫວຽດນາມເມື່ອງຂັ້ນ.

ພວກຜູ້ທີ່ເຂົ້າຮ່ວມກອງປະຊຸມຕ່າງກໍໄດ້ສະແດງທັດສະນະໃຫມ່ ກ່ຽວກັບການແກ້ໄຂບັນຫາຊາດເຊັ່ນດຽວກັນ. ກ່ອນຫນ້ານີ້ ຢູ່ໃນບັນດາເອກະສານຂອງພັກ ບັນຫາຊາດ ໄດ້ຍົກຂຶ້ນໃນຂອບເຂດ ສະຫະພັນ ອິນດູຈີນ ອັນທີ່ພວກລ່າເມືອງຂຶ້ນກໍ່ຕັ້ງຂຶ້ນ.

ເນື່ອງຈາກວ່າ ຄວາມແຕກຕ່າງກັນ ໃນການຂະຫຍາຍຕົວ ດ້ານການເມືອງ ແລະ ສັງຄົມ ລະຫວ່າງສາມປະເທດອິນດູຈີນ ເລິກເຊິ່ງຕື່ມອີກ ນັບແຕ່ເວລາທີ່ພວກຍີ່ປຸ່ນ ຜູ້ຮຸກຮານ ເຂົ້າມາອິນດູຈີນນັ້ນ, ກອງປະຊຸມຄົບຄະນະຂອງສູນກາງພັກ ຄັ້ງທີ 8 ຈຶ່ງໄດ້ສະເໜີ ໃຫ້ແກ້ໄຂ ບັນຫາຊາດໃນຂອບເຂດຂອງແຕ່ລະປະເທດຂອງໃຜລາວ. ສະນັ້ນຄຳຂວັນ ເຊິ່ງໄດ້ຖືກບັນທຶກໄວ້ໃນເມື່ອກ່ອນ ໃນໂຄງການ ດຳເນີນງານຂອງພັກກ່ຽວກັບການ "ສ້າງຕັ້ງລັດຖະບານສະຫະພັນ ສາທາລະນະລັດ ອິນດູຈີນ " ໃນປະຈຸບັນ ໄດ້ປ່ຽນເປັນ ຄຳຂວັນ " ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕຫວຽດນາມ". ທັດສະນະດັ່ງກ່າວ ອຳນວຍໃຫ້ແກ່ການທັບມ້າງກົນອຸບາຍຂອງສັດຕູ ທີ່ແນໃສ່ສ້າງຄວາມບາດໝາງອັນ ລະຫວ່າງກຳລັງຮັກຊາດ ຂອງຫວຽດນາມ, ຂະແມ, ລາວ; ຍິ່ງໄປກວ່ານັ້ນ, ເຫດການໃນເວລາຕໍ່ມາ ໄດ້ສະແດງໃຫ້ເຫັນວ່າ ຄຳຂວັນດັ່ງກ່າວ ໄດ້ປະກອບສ່ວນໃຫ້ກະຕຸກຊຸກຍູ້ ການຕໍ່ສູ້ປົດປ່ອຍຊາດ ຢູ່ທັງສາມປະເທດໃກ້ຄຽງ. ຂະນະດຽວກັນ ກອງປະຊຸມໄດ້ຢືນຢັນອີກເທື່ອໜຶ່ງວ່າ ການປະຕິວັດປົດປ່ອຍຊາດ ຢູ່ສາມປະເທດຕິດພັນກັບຢ່າງສະໜິດແໜ້ນ ແລະ ເພື່ອຢາກຍາດເອົາໄຊຊະນະ ມາໃຫ້ໄດ້ຕ້ອງອີງອາໄສຊຶ່ງກັນ ແລະ ກັນ, ຊ່ວຍເຫລືອ ແລະ ສະໜັບສະໜູນ ຊຶ່ງກັນ ແລະ ກັນ.

ກອງປະຊຸມຄົບຄະນະ ຂອງສູນກາງພັກຄັ້ງນັ້ນ ໄດ້ດຳເນີນໄປຢູ່ໃນເຮືອນຫລັງໜຶ່ງ ຊຶ່ງຕັ້ງຢູ່ໃນປ່າຕຶບ ສອກຫລີກ ຊຶ່ງໜ້ອຍຄົນທີ່ສຸດ ທີ່ຈະໄປຮອດ. ຢູ່ກາງປ່າບາງຄັ້ງຄາວກໍໄດ້ຍິນສຽງທະນີຮອງ, ສຽງເສືອຄາງ, ສຽງຈັກຈັ່ນຮ້ອງ, ສຽງນົກຮ້ອງຈູກໆ ຈິກໆ ເຄືອໄມ້ເປັນກ້ອນດົກໜາ, ກ່ຽວກອດກັນປົກຫຸ້ມເອົາເຮືອນຈົນຄືວ່າ ບໍ່ມີອາກາດຫັນໃຈ. ທຸກໆເຊົ້າ, ຜູ້ແທນທີ່ມາຮ່ວມກອງປະຊຸມ ພາກັນອອກມານອກເຮືອນເພື່ອສູບເອົາອາກາດສົດໃສ ປອດໂປ່ງຢູ່ຕີນປ່າຕຶບ ຊຶ່ງເປັນນາອັນໄດ ເປັນພັກໆສູງອັນໄປຕາມເນີນໂພນ.

ເມື່ອໃກ້ຈະສິ້ນສຸດກອງປະຊຸມເທົ່າໃດ ຄວາມອາດສາມາດດັ່ງກ່າວ ກໍຍິ່ງມະຫັບມະຫາຍໄປ. ຝົນທ່າໃຫຍ່ເຂດອາກາດຮ້ອນ ຕົກລົງມາຫລາຍວັນຕິດໆກັນ ສຽງນ້ຳຕົກລົງມາແຕ່ທີ່ສູງ ຄືກັນກັບນ້ຳຕົກຕາດ, ລຳຫ້ວຍຢູ່ຫ່າງຈາກບ່ອນເປີດປະຊຸມບໍ່ໄກປານໃດ ນ້ຳຢູ່ໃນລຳຫ້ວຍ ກໍຍິ່ງຂຶ້ນຈົນລົ້ນຝັ່ງ, ນ້ຳຖ້ວມເດີ່ນເຮືອນ, ຍິ່ງຂຶ້ນຈົນຮອດຂອບ

ປະຕູ.

ເກືອບບໍ່ໜ້າເຊື່ອວ່າ ຢູ່ກະໂຕແຫ່ງນີ້, ຢູ່ບ່ອນສອກຫລີກ ຊຶ່ງເປັນບ່ອນທີ່ຍ່າງເປັນສິບໆກິໂລແມັດ ກໍບໍ່ພໍ້ເງົາຄົນ, ໃນເງື່ອນໄຂຄ້າຍຄືກັນກັບ ເມື່ອຍຸກດຶກດຳບັນຢ່າງນີ້ ຢູ່ໃນຕູບໄມ້ໄຜ່ ບັນດາຜູ້ນຳພາພັກກອມມູນິດ ອິນດູຈີນ ກຳລັງນັ່ງ ຢູ່ອ້ອມໂຕະ ທີ່ເຮັດຂຶ້ນພໍລວກໆ ແລະ ຮັບຮອງເອົາມະຕິ ທີ່ມີຄວາມໝາຍ ຄັ້ງປະຫວັດສາດ ສຳລັບໂຊກຊາຕາ ຂອງຊາດຫວຽດນາມ ກໍຄືສຳລັບຂະບວນການ ປະຕິວັດທັງໝົດ ຢູ່ອິນດູຈີນ.

ແຕ່ດົນນານມາແລ້ວ ສະມາຊິກພັກ ລ້ວນແຕ່ເອີ້ນກັນວ່າ "ສະຫາຍ", ແຕ່ມີໜ້ອຍຄົນ ທີ່ເອີ້ນ ຫງວຽນອາຍກວັກ ຄືຈັ່ງຊັ້ນ. ຢູ່ປາກບໍ່, ປະຊາຊົນທ້ອງຖິ່ນ ເອີ້ນເພິ່ນວ່າ ທູເຊີນ (ຊາວບ້ານປ່າ) ແລະ ຍ້ອນວ່າເພິ່ນຈຶ່ງໜວດຍາວ ສະນັ້ນ ພວກເຂົາຈຶ່ງມັກເອີ້ນເພິ່ນວ່າ ຢາທູ. ແຕ່ວ່າ ເພິ່ນຈະເປັນຜູ້ເຖົ້າໄດ້ ຈັ່ງໃດ ໃນເມື່ອຜົມທີ່ຂະໜັບຫູຂອງເພິ່ນ ກໍຍັງບໍ່ທັນຫງອກເທື່ອ, ໃນວຽກງານ ເພິ່ນຊ້ຳພັດມີຄວາມຫ້າວຫັນ ແລະ ຄວາມກະຕືລືລົ້ນ ຄືຊາວໜຸ່ມ. ສະນັ້ນ ເມື່ອສະມາຊິກພັກ ຜູ້ໜຶ່ງເອີ້ນເພິ່ນວ່າ "ລຸງ" ຜູ້ອື່ນໆ ກໍເອີ້ນຕາມ. ຢູ່ຫວຽດນາມ ໂດຍສະເພາະແມ່ນຢູ່ຊົນນະບົດ ພວກເຂົາເຈົ້າ ມັກເອີ້ນຄົນທີ່ມີ ອາຍຸສູງກວ່າຕົນ ຄືຈັ່ງຊັ້ນແທ້. ທຳອິດ ພວກເຂົາເອີ້ນວ່າ ລຸງທູ ພາຍລູນມາ ເມື່ອເພິ່ນຕັ້ງຊື່ວ່າ ໂຮ່ຈີມິນ ພວກເຂົາພັດເອີ້ນເພິ່ນວ່າ ລຸງໂຮ່. ໃນໄລຍະບັ້ນປາຍຂອງຊີວິດ ພວກເຂົາເອີ້ນແບບງ່າຍໆວ່າ ລຸງ, ຖ້າວ່າສັບນີ້ ຖືກຂຽນ ເປັນໂຕໃຫຍ່ ຜູ້ໃດ ກໍຮູ້ວ່າ ໝາຍເຖິງປະທານໂຮ່ຈີມິນ.

໙

ເມື່ອນ້ຳໄດ້ບົກລົງລະດັບໃດໜຶ່ງ ແລະ ທ້ອງຟ້າທີ່ຫລາຍມື້ຕິດໆກັນມານີ້ ປົກຫຸ້ມດ້ວຍໝອກໜາ ກໍຄ່ອຍໆ ແຈ້ງອອກ, ບັນດາຜູ້ແທນ ທີ່ເຂົ້າຮ່ວມ ກອງປະຊຸມ ຄົບຄະນະ ເລີ່ມກະກຽມອອກເດີນທາງ. ບັນດາຜູ້ແທນ ທີ່ມາຈາກແຂວງ ຢູ່ທາງ

ພາກກາງ ແລະ ຢູ່ທາງພາກໃຕ້ ທີ່ຫ່າງໄກ ເປັນຜູ້ທີ່ອອກເດີນທາງກັບ ກ້ອນໝູ່.

ເວລາໄປສົ່ງພວກເຂົາ ທ່ານວຽນອາຍກວັກ ຖາມວ່າ:

"ພວກສະຫາຍຍັງຈື່ຄຳເວົ້າ ທີ່ຂ້າພະເຈົ້າໄດ້ແນະນຳໄປນັ້ນຢູ່ບໍ ? ຫ້າມບໍ່ໃຫ້ຖືເອກະສານກອງປະຊຸມຕິດຕົວໄປນຳ ບໍ່ວ່າໃນ ກໍລະນີໃດ".

ປະກົດວ່າ ມີຄົນຈຳນວນໜຶ່ງ ບໍ່ເອົາຫົວຊານຳຄຳແນະນຳດັ່ງກ່າວ ຂອງທ່ານວຽນອາຍກວັກ, ພວກເຂົາຮູ້ລ່ວງໜ້າແລ້ວວ່າ ການຕິດຕໍ່ ກັບຄະນະບໍລິຫານງານສູນກາງພັກ ເປັນເລື່ອງຍາກຫລາຍ, ສະນັ້ນ ຈຶ່ງໄດ້ຈົດເອກະສານ ຂອງກອງປະຊຸມຄົບຄະນະ ໄວ້ໃນເຈ້ຍນ້ອຍໆ ແລ້ວກໍ່ເຈ້ຍແຜ່ນນັ້ນ ຍັດໄວ້ໃນດູກເສື່ອ. ທ່ານວຽນອາຍກວັກ ສະເໜີຕໍ່ພວກເຂົາ ໃຫ້ທຳລາຍສິ່ງ ທີ່ຈົດກ່າຍດັ່ງກ່າວ ໃນທັນທີທັນໃດໂລດ ແລະ ເພິ່ນຕຳໜິພວກເຂົາຢ່າງເຄັ່ງຂຶມວ່າ:

"ຂ້າພະເຈົ້າ ໄດ້ກຳຊັບນຳພວກສະຫາຍຫລາຍເທື່ອແລ້ວ ແຕ່ພວກສະຫາຍຍັງບໍ່ຟັງ. ພໍ່ພວກເຮົາໄດ້ເວົ້າເລື້ອຍໆວ່າ "ນົກມີຫູ, ໜູມີປີກ". ສະຫາຍຈື່ໄດ້ບໍ ມີຫລາຍຄົນ ທີ່ຖືກຈັບແລ້ວ. ພວກສະຫາຍຜູ້ມີອາຍຸນ້ອຍກໍກາຍຊາວປີແລ້ວ ຜູ້ມີອາຍຸຫລາຍ ກໍກາຍສາມສິບປີແລ້ວ. ຊີວິດຂອງພວກສະຫາຍ ຫາກໍເລີ່ມຕົ້ນ, ຂໍໃຫ້ສະຫາຍຈົ່ງຄິດເບິ່ງວ່າ ການປະຕິວັດຫຸ່ມເທເຫື່ອແຮງ ຫລາຍເທົ່າໃດ ຈຶ່ງກໍ່ສ້າງພວກສະຫາຍ ໃຫ້ເປັນນັກຮົບທີ່ຈົງຮັກພັກດີ ແລະ ແໜ້ນແຟ້ນໄດ້. ຖ້າວ່າພວກສະຫາຍ ຫາກເສຍຊີວິດ ດ້ວຍນ້ຳມືຂອງພວກສັດຕູ ຍ້ອນຂາດສະຕິ ລະວັງຕົວນັ້ນ ຈະເອົາໃຜມາປ່ຽນພວກສະຫາຍໄດ້ ? ຂໍເວົ້າຊ້ຳຄືນອີກເທື່ອໜຶ່ງວ່າຈະມີຜູ້ຕິດຕໍ່ ຖືເອກະສານ ກອງປະຊຸມ ໄປສົ່ງຈົນຮອດບ່ອນຢູ່ ຂອງພວກສະຫາຍຕາມຫລັງ".

ການຈັບກຸມສະມາຊິກພັກເປັນວົງດງຢູ່ ກວາງເຈົາ, ຮົງກົງ, ໄຊງ່ອນ ກໍ່ຄືບົດຮຽນອັນຊຸດົມຮົ່ງມີ ຂອງນັກຮົບເຄື່ອນໄຫວໃຕ້ດິນ ໄດ້ສອນທ່ານວຽນອາຍກວັກໃຫ້ເອົາໃຈໃສ່ຕໍ່ບັນຫາຮັກສາຄວາມລັບ ແລະ ສະຕິລະວັງຕົວຢູ່ຕະຫລອດເວລາ. ອີງຕາມຂໍ້ລິເລີ່ມຂອງເພິ່ນ ລະບົບປ້ອງກັນອັນເຄັ່ງຄັດໄດ້ຖືກຈັດວາງຂຶ້ນຢູ່ເຂດປາກບໍ່, ໂດຍສະເພາະຢູ່ບ່ອນຕັ້ງກອງເສນາທິການ, ໃນເບື້ອງຕົ້ນແມ່ນຖ້ຳກົກບໍ່ ຕໍ່ມາແມ່ນຕູບນ້ອຍ ຕັ້ງຢູ່ໃນປ່າ

ເລີກເຊິ່ງເປັນບ່ອນທີ່ເພິ່ນໄດ້ຍົກຍ້າຍເຂົ້າໄປຢູ່ໃນທ້າຍປີ ໑໙໔໑. ບໍລິເວນຕິດກັບເຂດກອງຫລອນ ມີປະຊາຊົນທ້ອງຖິ່ນເປັນຜູ້ປົກປັກຮັກສາ; ໃນຕອນກາງຄືນ ໜ່ວຍເວນຍາມກອງຫລອນຖືກສົ່ງໄປປະຈຳຢູ່ຕາມຈຸດສຳຄັນໆ; ສຸດທ້າຍ ໄດ້ຈັດຕັ້ງເວນຍາມຕະຫລອດທັງວັນ ແລະ ຄືນ ອ້ອມຂ້າງເສນາທິການນັ້ນເອງ.

ຫງວຽນອາຍກວັກ ໄດ້ເຂົ້າຮ່ວມເວນຍາມກັບພູກຄົນ ໃນຕອນກາງຄືນ ເປັນປົກກະຕິ, ເຖິງວ່າມີຫລາຍຄົນຄັດຄ້ານດ້ວຍເຫດຜົນທີ່ວ່າ ເພິ່ນມີອາຍຸຫລາຍ, ສຸຂະພາບອ່ອນເພຍ. ຍ້ອນຄວາມຄັດຄ້ານດັ່ງກ່າວບໍ່ມີຜົນ, ສະນັ້ນພູກຄົນເປັນເອກະພາບກັນບໍ່ປຸກເພິ່ນໃຫ້ຕື່ນນອນເມື່ອເຖິງພຽນຍາມຂອງເພິ່ນ. ຂະນະດຽວວິທີດັ່ງກ່າວກໍຍັງມີຜົນໜ້ອຍຢູ່. ໃນກາງຄືນເດືອນມືດພິເສດນັກເກີດມີເຫດການດັ່ງຕໍ່ໄປນີ້: ມີສະຫາຍໜຶ່ງ ໄປຍາມແທນລຸງຫູ, ສະພາບການຢູ່ອ້ອມບໍລິເວນປົກກະຕິດີ ຄົນຍາມໄດ້ຍິນ ແຕ່ສຽງທະນີຮ້ອງ ຢູ່ກາງປ່າເລິກດັງແວ່ວໆມາ; ເວລານັ້ນຍຸງກັດ ຄົນຍາມຍົກມືຂຶ້ນຕົບຍຸງ ພັດໄປຕຳຫລັງຄົນອື່ນ ຊຶ່ງແທ້ຈິງແລ້ວພັດແມ່ນລຸງຫູ, ລຸງໄດ້ມາຮອດບ່ອນຍາມ ຢ່າງມິດງຽບແຕ່ເວລາໃດກໍບໍ່ຮູ້.

ສະຫາຍ ຫວູແອັງ ນັກກອມມູນິດອິນດູຈີນ ຜູ້ອາວຸໂສຄົນໜຶ່ງ ເຄີຍໄດ້ຢູ່ນຳຫງວຽນອາຍກວັກ ທີ່ປາກບໍ່ຄົນນານ, ໄດ້ຫວນຄືນວ່າ ຫງວຽນອາຍກວັກ ຖືບັນຫາຮັກສາຄວາມລັບເປັນບັນຫາສຳຄັນທີ່ສຸດ, ເພິ່ນເນັ້ນແລ້ວເນັ້ນອີກວ່າ ຖ້າບໍ່ຮູ້ຈັກກົດເກນ ພື້ນຖານ ແລະ ແບບວິທີຮັກສາຄວາມລັບ ກໍບໍ່ອາດເປັນນັກປະຕິວັດຢ່າງແທ້ຈິງໄດ້. ສະຫາຍຫວູແອັງ ເລົ່າຄືນວ່າ ມີເທື່ອໜຶ່ງ ພະນັກງານຕິດຕໍ່ຄົນໃໝ່ຂອງສູນກາງພັກຂຶ້ນມາ ທີ່ກາວບັງ ເພື່ອສົ່ງຈົດໝາຍທີ່ຝາກມາໃຫ້ສະຫາຍຫູ. ນາງໄດ້ເຂົ້າໄປໃນຖ້ຳກົກບໍ່ ແລະ ເຫັນຄົນຜູ້ໜຶ່ງນຸ່ງຫົ່ມເຄື່ອງຊົນເຜົ່ານຸງ, (ແມ່ນຫງວຽນອາຍກວັກ) ແລ້ວນາງ ກໍຖາມຄົນຜູ້ນັ້ນໂລດ. ເພິ່ນຈັບເອົາຈົດໝາຍ ແລະ ເວົ້າວ່າ "ສະຫາຍຫູບໍ່ຢູ່ ຂ້ອຍເປັນຄົນຕິດຕໍ່ຂອງສະຫາຍຫູ ຂ້ອຍຈະສົ່ງຈົດໝາຍນີ້ໃຫ້ສະຫາຍນັ້ນ". ພະນັກງານຕິດຕໍ່ ມີຊື່ວ່າ ມີ ອາໄສຢູ່ໃນເຂດກອງຫລອນດົນແລ້ວ ແລະ ຕິດຕາມຮຽນຊຸດອົບຮົມການເມືອງ. ສອງສາມມື້ຕໍ່ມາ ນາງຈຶ່ງສັງເກດເຫັນວ່າ ໂມງຮຽນສ່ວນໃຫຍ່ແມ່ນພະນັກງານ ຕິດຕໍ່ຂອງສະຫາຍຫູ ເປັນຜູ້ບັນຍາຍ. ດັ່ງນັ້ນນາງຈຶ່ງຄິດວ່າ "ແມ່ນແທ້, ນັກປະຕິວັດ ແມ່ນຄົນໜ້າປະຫລາດ, ຂະໜາດວ່າພະນັກງານຕິດຕໍ່ທຳມະດາໆກໍຍັງອະທິບາຍພູກສົ່ງ ພູກ

ຢ່າງໄດ້ດີປານນີ້". ນາງຍັງບໍ່ໄດ້ພົບສະຫາຍທູ, ແຕ່ມີຫລາຍເທື່ອໄດ້ຍິນອ້າຍນ້ອງ ໃນຊຸດຮຽນເລົ່າເລື່ອງກ່ຽວກັບຄົນໃດຄົນໜຶ່ງຊື່ວ່າ ຫງວຽນອາຍກວັກ ດ້ວຍຄວາມນິຍົມຊົມຊອບ. ຫລັງຈາກຮຽນຈົບ ນາງຖືກສົ່ງໄປແຂວງຮ່າດົງ, ນະທີ່ນັ້ນນາງໄດ້ເຂົ້າຮ່ວມການລຸກຮື້ຂຶ້ນປະກອບອາວຸດ. ໃນເດືອນສິງຫາ ປີ ໑໙໔໕ ຫລັງຈາກທີ່ການປະຕິວັດເດືອນສິງຫາໄດ້ຮັບໄຊຊະນະແລ້ວ, ລາຍຊື່ຂອງຄະນະລັດຖະບານຊົ່ວຄາວ ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ຖືກປະກາດອອກ. ໃນລາຍຊື່ບຸກຄົນດັ່ງກ່າວ ນາງບໍ່ເຫັນທັງຊື່ຂອງສະຫາຍທູ ແລະ ຂອງສະຫາຍຫງວຽນອາຍກວັກ ຊຶ່ງເປັນບຸກຄົນທີ່ມີຄົນເວົ້າເຖິງຫລາຍຢູ່ປາກບໍ່ ເພາະວ່າໃນຄາວນັ້ນ ຫງວຽນອາຍກວັກ ໄດ້ປ່ຽນຊື່ເປັນ ໂຮຈີມິນແລ້ວ. ຈົນມາຮອດວັນທີ ໘ ເດືອນກັນຍາ ປີ ໑໙໔໕ ເມື່ອສະມາຊິກ ຂອງລັດຖະບານໃໝ່ອອກມາປະກົດຕົວທີ່ສະໜາມຫລວງບາດິງ ຢູ່ຮ່າໂນ້ຍ, ນາງຈຶ່ງຕົກສະເງີ້ເມື່ອເຫັນວ່າ ປະທານສາທາລະນະລັດປະຊາທິປະໄຕຫວຽດນາມ ທີ່ກ່າວອອກມາປະກົດ ຄືພັດແມ່ນຄົນຕິດຕໍ່ຂອງສະຫາຍທູຊຶ່ງເປັນຜູ້ທີ່ນາງໄດ້ມອບຈົດໝາຍໃຫ້ໃນເມື່ອກ່ອນ. ມາເຖິງບັດນີ້ນາງຈຶ່ງຮູ້ໝົດທຸກຢ່າງ.

ດ້ວຍຄວາມພະຍາຍາມຂອງ ຫງວຽນອາຍກວັກ ເພື່ອນຮ່ວມຮົບຂອງເພິ່ນ ຈຶ່ງມີສະຕິລະວັງຕົວສູງເທື່ອລະກ້າວ. ສະນັ້ນ ພວກນັກສືບສອດແນມລ່າເມືອງຂຶ້ນ ຈຶ່ງບໍ່ສາມາດຊອກພົບທີ່ຕັ້ງຂອງກອງເສນາທິການປະຕິວັດ ຕັ້ງເປັນເວລາຫລາຍປີ, ເຖິງວ່າດີດັ່ງທີ່ໄດ້ກ່າວມາຢູ່ຂ້າງເທິງນັ້ນ ພວກເຂົາໄດ້ຮັບຂ່າວວ່າ ຜູ້ນຳພັກກອມມູນິດ ອິນດູຈີນກຳລັງເຄື່ອນໄຫວຢູ່ບົນດິນແດນແຂວງ ກາວບັ່ງ ກໍຕາມ. ມີຫລາຍເທື່ອທີ່ພວກ ນັກສືບສອດແນມໄດ້ວົນມິດໄປຮອດບ່ອນທີ່ຫ່າງຈາກທີ່ຕັ້ງກອງເສນາທິການປະມານ ສອງສາມຮ້ອຍແມັດ, ແຕ່ພວກເຂົາກໍຍັງບໍ່ມີວິທີໃດທີ່ຈະຊອກພົບບ່ອນດັ່ງກ່າວໄດ້.

ຄຽງຄູ່ກັບການຂະຫຍາຍການເຄື່ອນໄຫວຂອງຜູ້ຮັກຊາດພາຍໃນແຂວງ, ອຳນາດປົກຄອງລ່າເມືອງຂຶ້ນກໍໄດ້ເພີ່ມທະວີການປາບປາມດ້ວຍຫລາຍວິທີ. ທົ່ວທຸກແຫ່ງບົນສາຍທາງທີ່ໄປສູ່ເຂດດັ່ງກ່າວ ໄດ້ປະກົດເຫັນພວກທະຫານຜ້າກະຕ່ຽວສີຂຽວ ເຊິ່ງເປັນ ທະຫານຫລວງຂອງເຈົ້າຊີວິດ. ຄຳສັ່ງປະກາດພາວະສຸກເສີນໄດ້ຖືກປະກາດໃຊ້. ຕົກກາງຄືນມາ ໃຜອອກຈາກບ້ານຕົນລ້ວນແຕ່ຖືກຈັບທັນທີ. ອີງຕາມຂໍ້ມູນທີ່ຜູ້ຮັກຊາດ ຍຶດມາໄດ້ນັ້ນ ສະແດງໃຫ້ເຫັນວ່າ ພວກນັກສືບສອດແນມລ້ວນແຕ່ຮູ້ຈັກຮາກຖານລັບທີ່ສຸດ ຫລາຍແຫ່ງຢູ່ເຂດກອງຫລອນ, ໃນນັ້ນອາດຈະລວມທັງກອງເສນາທິການປະຕິວັດ.

ສະນັ້ນ ຈຶ່ງໄດ້ຕົກລົງກັນວ່າ ຈະຕ້ອງສົ່ງ ທ້າວວຽນອາຍກວັກ ໄປສູ່ເຂດ ທີ່ປອດໄພກວ່າ, ແຕ່ວ່າຈະເຮັດແນວນັ້ນມັນບໍ່ແມ່ນເລື່ອງງ່າຍ. ການເດີນທາງໃນປ່າດົງ ໃນຕອນກາງຄືນເກືອບວ່າເປັນໄປບໍ່ໄດ້, ອີກປະການໜຶ່ງ ອາດຈະຕົກເຂົ້າໃນວົງ ດັກສະກັດຢ່າງງ່າຍດາຍ. ການເດີນທາງໃນຕອນກາງເວັນ ຜ່ານໜ່ວຍລາດຕະເວນຂອງສັດຕູ ກໍຍິ່ງເປັນເລື່ອງທີ່ຂາດຄວາມຮອບຄອບ. ທາງອອກຢູ່ໃສ ? ໃນທີ່ສຸດ ເມື່ອຕົກຢູ່ໃນສະພາບຈົນຕາແຈ ທ້າວວຽນ ເຊິ່ງນັ່ງຟັງນິດໆຢູ່ເທິງແປ້ນມ້າ ກ່ຽວກັບຂໍ້ສະເໜີຕ່າງ ກໍຖາມສະຫາຍທີ່ມາຈາກທ້ອງຖິ່ນຢ່າງບໍ່ຄາດຄິດວ່າ:

"ຢູ່ເຂດພວກສະຫາຍ ມີຄົນຕ້ອງການໝໍເຢົາແດ່ບໍ ?"

"ມີແຫລະບໍ, ຜູ້ໃດກໍ່ລ້ວນແຕ່ຕ້ອງການໝໍເຢົາເປັນປະຈຳ ບໍ່ແມ່ນວ່າຕ້ອງການເທື່ອດຽວ", ພວກເຂົາຕອບດ້ວຍຄວາມປະຫລາດໃຈ.

ຢູ່ເຂດພູຜາປ່າດົງທີ່ຫ່າງໄກ ສອກຫລີກແຫ່ງນີ້ບໍ່ເຄີຍມີແພດ ຈັກເທື່ອ. ໃນທຸກໆກໍລະນີ ປະຊາຊົນລ້ວນແຕ່ອາໄສໄພເພິ່ງໝໍເຢົາ ມາປົວພະຍາດ. ຢູ່ແຫ່ງນີ້ກໍຄືຢູ່ ໃນເຂດຊົນຊາດທີ່ຫລ້າຫລັງອື່ນໆ ໝໍເຢົາໄດ້ຮັບຄວາມເຊື່ອຖືສູງສຸດ.

"ສະນັ້ນກຽມທຸກສິ່ງທຸກຢ່າງທີ່ຈຳເປັນສຳລັບໝໍເຢົາໃຫ້ຂ້ອຍ", ທ້າວວຽນອາຍກວັກ ເວົ້າຢ່າງເດັດດ່ຽວ.

ສະມາຊິກພັກຜູ້ໜຸ່ມນ້ອຍເຜົ່າມຽງ ຄົນໜຶ່ງຖືກຄັດເລືອກເປັນຄົນພາທາງ ໃຫ້ທ້າວວຽນອາຍກວັກ. ຫວ້ານຢາທານັ້ງ ແລະ ສິ່ງຂອງທີ່ເປັນອາຊີບຂອງໝໍເຢົາ ກໍຊອກຫາມາປະຊາຊົນໃນເຂດດັ່ງກ່າວ. ສຸດທ້າຍ ທຸກຢ່າງກໍໄດ້ກະກຽມສຳເລັດ. ຜູ້ພາທາງຫາບກະຕ່າສອງໜ່ວຍ, ຢູ່ໃນກະຕ່າມີປຶ້ມດູນິສອງຫົວ, ໄມ້ຄວັດທີ່ມີເຄື່ອງໝາຍລຶກລັບມີອັນນຶກຍູງອັນໜຶ່ງກັບຄ້ອງນ້ອຍເຮັດດ້ວຍທອງໜຶ່ງໜ່ວຍ, ມີກະທູບແດດເລັກນ້ອຍ , ໄກ່ເປັນໜຶ່ງໂຕ ເພື່ອໃຫ້ໝໍເຢົາປາດເອົາເລືອດໄກ່ແລ້ວປົວຄົນເຈັບ, ເຫລົ້າ ໜຶ່ງແກວ. ທ້າວວຽນອາຍກວັກ ນຸ່ງເສື້ອລາມສີດຳ ແສວໂຕໜັງສືທານທີ່ອານເຂົ້າໃຈຍາກ, ໃສ່ເກີບແພ, ຖືໄມ້ຄອນເທົ້າ.

ທັງສອງຄົນອອກເດີນທາງໃນເວລາໃກ້ຈະທ່ຽງວັນ. ເມື່ອຍ່າງໄປຮອດ ປ້ອມຍາມທຳອິດ, ຜູ້ພາທາງຕອບຄຳຖາມຂອງນາຍທະຫານວ່າ ລາວພາໝໍເຢົາມາປົວພະຍາດໃຫ້ເມຍລາວເອງ. ໃຊ້ວິທີແກ້ດັ່ງກ່າວ ທັງສອງຄົນຈຶ່ງຍ່າງຜ່ານປ້ອມຍາມໄດ້ ຈຳນວນໜຶ່ງ. ທັນໃດນັ້ນ ເຂົາທັງສອງຄົນແນມເຫັນວ່າຢູ່ຕໍ່ໜ້າມີຊາວນາກຸ່ມໜຶ່ງ ກັບມາ

ແຕ່ຕະຫລາດ, ພວກເຂົາຈະໄປທາງດຽວກັນ. ສອງຄົນແນມເບິ່ງຫນ້າກັນ ບັດແລ້ວຕົກລົງຈະປະປົນເຂົ້າໃນຝູງຄົນດັ່ງກ່າວ. ແຕ່ເມື່ອສອງຄົນຫາກໍຍ່າງໄປໄດ້ປະມານ ສອງສາມຮ້ອຍແມັດ ພວກເຂົາກໍແນມເຫັນປ້ອມຍາມຢູ່ຕໍ່ຫນ້າ. ມີທະຫານຍາມສອງສາມ ຍັກຍ່າງເຂົ້າມາໃກ້ພວກເຂົາ ແລະ ລົງມືຊອກຄົ້ນ, ກວດກາແຕ່ລະຢ່າງໃນກະຕ່າ ພວກເຂົາຍັງເປີດປຶ້ມດູນໍ ແລະ ທັງວົມທັງບີບຄັ້ນໄກ່ອີກ.

ໃນຂະນະນັ້ນ, ຫົວຫນ້າປ້ອມຍາມກໍ່ຍ່າງອອກຈາກປະຕູປ້ອມຍາມ.

"ພວກເຈົ້າຈະໄປໃສ ໃນຍາມແດດກ້າຄືຈັ່ງຊີ້ ?ຫົວຫນ້າປ້ອມຍາມຖາມສອງຄົນທີ່ກຳລັງຖືກກວດຄົ້ນ ດ້ວຍອາການຄືຄົນຂີ້ຄ້ານ".

"ຂ້ານ້ອຍພາຫມໍເຢັາມາປົວພະຍາດໃຫ້ແມ່ເຖົ້າຂ້ານ້ອຍ , ຄົນພາທາງຍໍມືຄົບຈົ້ງກົ້ງໆຕອບຫົວຫນ້າປ້ອມຍາມ".

"ໂອ ໂຊກດີແທ້!", ຫົວຫນ້າປ້ອມຍາມດີໃຈບັກໃຫຍ່ຮ້ອງຂຶ້ນ. "ເມຍຂ້ອຍກຳລັງເຈັບຢູ່. ເຊີນຫມໍເຢັາໄປແວ່ເຮືອນແດ່".

"ໂດຍຂ້ານ້ອຍ ເພິ່ນເປັນຫມໍຢາພື້ນເມືອງເທົ່ານັ້ນດອກ, ເພິ່ນຮູ້ຈັກປົວພະຍາດບາງອັນເທົ່ານັ້ນ ເພິ່ນຊໍ້າພັດຍັງເປັນຄົນຫູຫນວກອີກ", ຄົນພາທາງຕອບກະຕຸກກະຕັກ.

ຄົນພາທາງແນມເບິ່ງອ້ອມຮອບ ແລ້ວສັງເກດເຫັນມີຫລັກແຫລ່ງຜູ້ຫນຶ່ງຈາກ ສະມາຄົມກູ້ຊາດທັງເປັນຄົນຮູ້ຈັກກັນ ນັ່ງຢູ່ຫ່າງຈາກນັ້ນບໍ່ໄກ. ໂດຍບໍ່ຕັ້ງໃຈ ລາວໃຊ້ມືຄຳ້ທາຍປືນສັ້ນທີ່ເຫນັບຢ່າງລັບໆໃນຕົວລາວ. ລາວຄິດໃນໃຈວ່າ: "ຖ້າສະພາບການ ອັນຕະລາຍທີ່ສຸດ ລາວເອງກໍຈະໃຫ້ສັນຍານແກ່ຄົນຜູ້ນັ້ນ ລອງໃຊ້ປືນຂູ່ແລ້ວກໍແລ່ນເຂົ້າປ່າ. ຢູ່ບໍລິເວນນີ້ ມີຫລາຍສະຫາຍຂອງເຮົາ ພວກເຂົາເຈົ້າຈະຊ່ວຍເຫລືອ".

ໃນຂະນະນັ້ນ ຫົວຫນ້າປ້ອມຍາມກ້າວບາດຕີນເຂົ້າມາໃກ້ຫມໍເຢັາທີ່ກຳລັງຢືນນິ່ງຢູ່, ມັນເອົາມືຕົບບ່າຫມໍເຢັາ, ຈາກນັ້ນເວົ້າຊ້ຳອີກວ່າ:

"ທ່ານຫມໍເອີຍ, ຂໍໃຫ້ແວ່ເຮືອນຂ້ອຍຈັກບຶດຫນຶ່ງ ເພື່ອກວດພະຍາດ ໃຫ້ເມຍຂ້ອຍ".

ຫມໍເຢັາອວ່າຍຫນ້າຄືນຢ່າງເຊື່ອຍຊາ ບັດແລ້ວກໍຍົກມືຂຶ້ນມາອັດຫູ ຈາກນັ້ນ ກໍເວົ້າເປັນລັກສະນະແຜດສຽງວ່າ:

"ເວົ້າຫຍັງເກາະ ?"

ຫມໍເຢັາຍື່ງແຂ້ວອອກໃຫ້ເຫັນ, ດັ່ງນັ້ນ ຫົວຫນ້າປ້ອມຍາມຈຶ່ງເຫັນວ່າແຂ້ວຂອງ

ໜໍເຢົາເຄິ່ງເຫລືອງເຄິ່ງດໍາ. ຍ້ອມແຂ້ວດໍາ ເພື່ອບໍ່ໃຫ້ເປັນແມງ ແມ່ນຄວາມຊິນເຄີຍ ຂອງຄົນຫວຽດນາມ. ກ່ອນອອກເດີນທາງ ເພື່ອຄວາມຮອບຄອບ ຫງວຽນອາຍກວັກຈຶ່ງ ໄດ້ຍ້ອມແຂ້ວດ້ວຍຢາງຕົ້ນໄມ້ອ່ອນ, ເບິ່ງເພິ່ນຄືກັນກັບຄົນເຖົ້າ ຢູ່ແຖວບ້ານນອກ ຄອກ ຄາເມ.

"ອາດຍາເຫັນແລ້ວຕິບໍ ຂ້ານ້ອຍໄດ້ເວົ້າແລ້ວນ່າ ໜໍເຢົາຄົນນີ້ຫູໜວກອີ່ຫລີ . ແຕ່ຢູ່ທາງເຮືອນ ແມ່ເຖົ້າຂ້ານ້ອຍຊໍ້າພັດກໍາລັງເຈັບໜັກ, ອາດຍາທ່ານຈຶ່ງອິດູສົງສານ ແດ້ທອນ", ຄົນພາທາງອ້ອນວອນຂໍນໍາ.

"ເອີ ໄດ້ແລ້ວ ! ຈັ່ງເວົ້ານໍາພໍ່ເຖົ້າວ່າ ເວລາກັບຈັ່ງໃດກໍມາບ່ອນກູແທ້ງ" ຫົວໜ້າປ້ອມຍາມເວົ້ານໍາຄົນພາທາງ, ຈາກນັ້ນກໍກວັກມືຢ່າງສະຫງ່າຜ່າເຜີຍເປັນ ສັນຍາ ບອກໃຫ້ສອງຄົນເດີນຕໍ່ໄປໄດ້.

ບົນໄລຍະທາງທີ່ຍັງເຫລືອ ສອງຄົນບໍ່ພໍ້ອຸປະສັກກີດຂວາງຫຍັງອີກ. ເມື່ອມາຮອດ ບ່ອນທີ່ກໍານົດໄວ້ ຄົນພາທາງເລົ່າເລື່ອງທັງໝົດທີ່ເກີດຂຶ້ນໃຫ້ພວກສະຫາຍຟັງ. ເມື່ອ ເລົ່າຮອດບ່ອນຕື່ນເຕັ້ນເຫື່ອກໍ່ໄຫລຕາມໃບໜ້າ, ລາວຕື່ນເຕັ້ນຈົນຫລົງຮ້ອງຂຶ້ນວ່າ:

"ລຸງຫູ ໜຸ່ມໜ່ຽງອີ່ຫລີ ! ຖ້າວ່າລຸງບໍ່ເປັນຄືແນວນັ້ນ ແມ່ນອນວ່າ ຂ້ອຍເຮັດວຽກ ບໍ່ຫລ້ອນ".

ໃນເດືອນມິຖຸນາປີ ໑໙໔໑ ໂດຍຕາງໜ້າຫວຽດມິນ, ຫງວຽນອາຍກວັກ ໄດ້ ຂຽນຄໍາຮຽກຮ້ອງໄປຍັງເພື່ອນຮ່ວມຊາດທົ່ວປະເທດ ໃນນັ້ນເພິ່ນຮຽກຮ້ອງໃຫ້ທຸກຄົນລຸກ ຂຶ້ນຕໍ່ສູ້ປົດປ່ອຍຊາດ. ເພິ່ນຊີ້ໃຫ້ປະຊາຊົນເຫັນວ່າ ພວກລ່າເມືອງຂຶ້ນຝະລັ່ງ "ດໍາເນີນ ນະໂຍບາຍໜີບເຕັງປາບປາມ ແລະ ຂ້າຟັນລັນແທງຢູ່ໃນປະເທດຂອງພວກເຮົາ" ຂະ ນະດຽວກັນ ຝະລັ່ງຊໍ້າພັດ "ຂາຍພວກເຮົາໃຫ້ຍີ່ປຸ່ນ. ສະນັ້ນ ປະຊາຊົນເຮົາຈຶ່ງຕົກ ຢູ່ ພາຍໃຕ້ແອກສອງຊັ້ນ ເຮົາກາຍມາເປັນສັດລາກແກ່ໃຫ້ຄົນຝະລັ່ງ ແລະ ເປັນ ຂ້າທາດ ສໍາລັບຍີ່ປຸ່ນຜູ້ຮຸກຮານ".

ຄໍາຮຽກຮ້ອງໄດ້ສິ້ນສຸດລົງດ້ວຍຄໍາເວົ້າອັນໜ້າດູດດື່ມວ່າ "ນັກຮົບປະຕິວັດ ທັງ ຫລາຍ! ວັນເວລາປົດປ່ອຍມາຮອດແລ້ວ. ຈົ່ງເຊີດຊູຄັນທຸງແຫ່ງການລຸກຮື້ຂຶ້ນໃຫ້ສູງ , ຈົ່ງນໍາພາທົ່ວປວງຊົນໂຄ່ນລົ້ມອໍານາດການປົກຄອງຂອງພວກຝະລັ່ງ ແລະ ຍີ່ປຸ່ນ ຜູ້ຮຸກ ຮານ!".

ຄໍາຮຽກຮ້ອງດັ່ງກ່າວໄດ້ແຜ່ກະຈາຍໄປທົ່ວປະເທດ. ໃບປິວທີ່ບັນຈຸຄໍາຮຽກຮ້ອງ

ນີ້ໄດ້ສົ່ງຈາກມືຜູ້ນັ້ນຫາຜູ້ນີ້. ນັກໂຄສະນາຂອງພັກ ເຄື່ອນໄຫວຢູ່ຊົນນະບົດກໍ່ດີຢູ່ໃນ ຕົວເມືອງ. ຄຳເວົ້າຂອງຫງວຽນອາຍກວັກ ຝັງເລິກໃນດວງໃຈຂອງປະຊາຊົນຫມົດທຸກຄົນ ກະຕຸກຊຸກຍູ້ພວກເຂົາໃຫ້ລຸກຂຶ້ນຕໍ່ສູ້.

໔

ຂະບວນການຫວຽດມິນ ນັບມື້ນັບເຂັ້ມແຂງຂຶ້ນຈັກໄຈ. ຢູ່ໃນປະຊາຄົມ ຫລາຍແຫ່ງຂອງແຂວງກາວບັງໄດ້ມີສະມາຄົມກູ້ຊາດໃຫມ່ຕື່ມຂຶ້ນ ແລະ ກອງທະຫານລາດກອງຫລອນໃຫມ່ປະກົດຕົວຂຶ້ນຕື່ມອີກຢ່າງລຽນຕິດ. ຖານທີ່ຫມັ້ນຂອງກອງຫລອນ ອັນແຫນ້ນຫນຽວໄດ້ຖືກສ້າງຂຶ້ນເທື່ອລະກ້າວ ຢູ່ໃນບາງແຂວງ ທີ່ຢູ່ໃກ້ຄຽງ. ແຕ່ປານນັ້ນ ການຂະຫຍາຍຕົວຂອງຂະບວນກອງຫລອນໄດ້ດຳເນີນໄປພາຍໃຕ້ເງື່ອນໄຂທີ່ບໍ່ເອື້ອ ອຳນວຍເລີຍ. ກອງຫລອນເກືອບວ່າບໍ່ມີອາວຸດເລີຍ, ພວກເຂົາໄດ້ປະກອບອາວຸດປະເພດປະຖົມປະຖານເຊັ່ນ: ຫລາວ, ຫອກ, ງ້າວ, ກະບີ່. ແຕ່ປະການສຳຄັນແມ່ນການ ຂາດເຂີນຫົວຈັກຫລັກແຫລ່ງຜູ້ແຫນ້ນຫນຽວຂອງພັກ, ຜູ້ທີ່ມີລະດັບການເມືອງ ແລະ ທີ່ຈົງຮັກພັກດີຕໍ່ພາລະກິດປະຕິວັດ, ຜູ້ທີ່ສາມາດດຳເນີນວຽກງານໂຄສະນາໃນຫມູ່ມະຫາຊົນໄດ້. ຢູ່ໃນການປະຊຸມກໍ່ດີຢູ່ໃນກອງປະຊຸມຂອງພັກ ຫງວຽນອາຍກວັກ ມັກເນັ້ນແລ້ວເນັ້ນ ອີກວ່າ:

"ຂະບວນການປະຕິວັດປຽບສະເຫມືອນຄື້ນທະເລກະທົບຝັ່ງ, ສ່ວນຫົວຈັກ ຫລັກແຫລ່ງທີ່ແຫນ້ນຫນຽວ ແລະ ຈົ່ງຮັກພັກດີປຽບສະເຫມືອນຄູປ້ານນ້ຳ".

ໃນເວລາອົບຮົມສຶກສາພະນັກງານພັກ ເພື່ອພິສູດໃຫ້ເຫັນວ່າ ພຶດຕິກຳໃດຫນຶ່ງເປັນສິ່ງຈຳເປັນ ຫງວຽນອາຍກວັກ ມັກຍົກເອົາບົດຮຽນປະຫວັດສາດຂອງພັກກອມມູນິດ (ໂບນເຊວິກ) ແຫ່ງສະຫະພາບໂຊວຽດຂຶ້ນມາເວົ້າ, ໃນຖານະບົດຮຽນນີ້ເປັນແບບຢ່າງຂອງການປະດິດສ້າງປະຕິວັດ. ປຶ້ມ "ປະຫວັດສາດໂດຍຫຍໍ້ຂອງພັກກອມມູນິດໂບນເຊວິກ ແຫ່ງສະຫະພາບໂຊວຽດ" ຊຶ່ງແມ່ນເພິ່ນເອງເປັນຜູ້ແປ ໄດ້ກາຍເປັນປຶ້ມ ແບບຮຽນຂັ້ນພື້ນຖານ, ເປັນປຶ້ມປະຈຳຕົວຂອງ ຫົວຈັກຫລັກແຫລ່ງພັກຢູ່ປາກບໍ່. ມີຫລາຍຄົນຍັງຈົດຈຳເຫດການດັ່ງຕໍ່ໄປນີ້: ຢູ່ເຂດກອງຫລອນ ໃນຂະນະທີ່ກຳລັງຫວຽດມິນ ເຕີບ

ໃຫຍ່ເຂັ້ມແຂງແລະ ຖັນແຖວສະມາຄົມກູ້ຊາດຂະຫຍາຍຕົວມັກເກີດມີການຄາດຄະກຳພວກປະຕິການທ້ອງຖິ່ນເຊັ່ນ: ພໍ່ບ້ານ ແລະ ລູກແຫລງຕົ້ນມີຄົນອື່ນໆຂອງອຳນາດ ປົກຄອງເມືອງອື່ນ. ຫງວຽນອາຍກວັກ ຕຳໜິຢ່າງຮຸນແຮງຕໍ່ການກະທຳດັ່ງກ່າວ. ເພິ່ນຄັດເອົາບາງຕອນຈາກປຶ້ມ "ປະຫວັດສາດໂດຍຫຍໍ້ຂອງພັກກອມມູນິດ (ໂບນເຊວິກ) ແຫ່ງ ສະຫະພາບໂຊວຽດ" ເຊິ່ງເວົ້າວ່າ ລັດທິເລນິນ ບໍ່ເຫັນດີນຳການນາບຂູ່ບຸກຄົນ ຈາກນັ້ນ ກໍ່ເອົາມາຕີພິມເປັນຫລາຍສະບັບສົ່ງໄປໃຫ້ໜ່ວຍພັກ ພ້ອມດ້ວຍຄຳສັ່ງຊຶ່ງຕ້ອງຄົ້ນຄວ້າແລະປະຕິບັດ.

ຊຸດຮຽນການເມືອງທີ່ເຄີຍໄຂຂຶ້ນຢູ່ຊານເມືອງຕຶງໄຕຂອງຈີນ ໄດ້ສືບຕໍ່ໄຂຂຶ້ນ ຢູ່ທີ່ປາກບໍ່ເຊັ່ນດຽວກັນ. ຍ້ອນວ່າຫງວຽນອາຍກວັກ ໄດ້ດຳລົງຊີວິດຫລາຍປີຢູ່ໂຊວຽດ, ສະນັ້ນ ນັກຮຽນຫລາຍຄົນຈຶ່ງມັກຂໍໃຫ້ເພິ່ນເລົ່າເລື່ອງ ກ່ຽວກັບການດຳລົງຊີວິດ ຢູ່ດິນແດນຫ່າງໄກດັ່ງກ່າວ ໃຫ້ພວກເຂົາຟັງ ແລະ ກະໂຕເພິ່ນເອງ ກໍມັກຍົກເອົາຊີວິດ ຂອງຊາວຜູ້ອອກແຮງງານລັດເຊຍມາເປັນແບບຢ່າງ. ເພິ່ນໄດ້ເລົ່າສູ່ຫລາຍຄົນຟັງ, ໃນນັ້ນ ມີທັງຄົນທີ່ກົກໜັງສື, ວ່າປະຊາຊົນລັດເຊຍໄດ້ທົນທຸກທໍລະມານຄືແນວໃດ ຢູ່ໃຕ້ແອກ ພະເຈົ້າຊາ, ພັກຂອງຊົນຊັ້ນກຳມະກອນ ຊຶ່ງແມ່ນ ເລນິນ ເປັນຜູ້ສ້າງຕັ້ງຂຶ້ນ ແລະທັງເປັນພັກທີ່ປຸກລະດົມປະຊາຊົນໃຫ້ຈັບອາວຸດລຸກຂຶ້ນຕໍ່ສູ້ ເພື່ອອິດສະຫລະພາບ, ຄວາມສຸກ ແລະຄວາມສະເໝີພາບນັ້ນ ໄດ້ປະກົດຕົວຂຶ້ນຄືແນວໃດ. ເພິ່ນເວົ້າຕື່ມອີກຢ່າງໜັກແໜ້ນວ່າ:

"ທຸກສິ່ງທຸກຢ່າງທີ່ປະຊາຊົນຜູ້ອອກແຮງງານລັດເຊຍໄດ້ເຮັດແລ້ວ, ພວກເຮົາ ກໍຈະສາມາດເຮັດໄດ້ ແລະ ເດັດຂາດຕ້ອງເຮັດໄດ້. ໜ້າທີ່ຂອງພວກເຮົາແມ່ນຮຽນ ນຳການປະຕິວັດລັດເຊຍ. ພວກສະຫາຍທັງຫລາຍ, ພວກສະຫາຍຈົ່ງເຊື່ອວ່າ ເມື່ອການປະຕິວັດໄດ້ຮັບໄຊຊະນະແລ້ວ ປະເທດຊາດພວກເຮົາຈະກໍ່ສ້າງສັງຄົມອັນຈີບງາມຄືສັງຄົມລັດເຊຍໂຊວຽດ".

ສະໄໝນັ້ນແມ່ນສະໄໝທີ່ໜັກໜ່ວງທີ່ສຸດສຳລັບປະຊາຊົນໂຊວຽດ,ບົນເສັ້ນທາງບຸກເຂົ້າສູ່ ມົດສະກູ ໝາກຫົວໃຈຂອງປະເທດໂຊວຽດ ກອງທັບຟາດຊິດ ເຍົາຜານ ລັດເບໂລລຸດເຊຍ ແລະ ແຂວງ ສະໂມເລັນ. ນັກຮຽນຊຸດຮຽນຫລາຍຄົນ ລວມທັງ ບັນດາເພື່ອນມິດຜູ້ໃກ້ຊິດຂອງຫງວຽນອາຍກວັກ ລ້ວນແຕ່ຖາມເພິ່ນດ້ວຍຄວາມກັງວົນໃຈວ່າ: ປະ

ເຫດໃດໂຊວຽດຈະສາມາດຕ້ານທານຕໍ່ການບຸກໂຈມຕີອັນໜັກໜ່ວງຄືແນວນີ້ໄດ້ບໍ່ ?

"ພວກຟາດຊິດຖຸຍໂມ້ສາມຫາວວ່າ ພວກເຂົາຈະດັບສູນສະຫະພາບໂຊວຽດ ໄດ້ຢ່າງໄວວາ ແຕ່ເລື່ອງດັ່ງກ່າວ ບໍ່ມີທາງເປັນໄປໄດ້ຈັກເທື່ອ", ທ່ານວຽນອາຍກວັກຕອບຢ່າງເດັດດ່ຽວ. ກະທັ້ງແຕ່ໃນສະຕະວັດທີ 19 ພຸ້ນ ເມື່ອປະເທດລັດເຊຍ ຍັງອຶກສັ່ນຂວັນເສຍຢູ່ໃຕ້ແອກພະເຈົ້າຊາ, ກອງທັບຈຸ້ນຢຽນຂອງນາໂປເລອົງ ກໍຍັງຖືກປະຊາຊົນລັດເຊຍຕີໃຫ້ປະລາໄຊໄປ. ດຽວນີ້ ປະເທດລັດເຊຍແມ່ນລັດສັງຄົມນິຍົມ ແລະ ປະຊາຊົນຂອງປະເທດລັດເຊຍນັ້ນ ດຳລົງຊີວິດຢູ່ໃຕ້ລະບອບສັງຄົມນິຍົມເປັນເວລາສອງທົດສະວັດແລ້ວ ໂດຍຮູ້ຈັກຄວາມເບີກບານມ່ວນຊື່ນຂອງຊີວິດໃໝ່, ຊີວິດທີ່ບໍ່ມີສະພາບຄົນຂູດຮີດຄົນ, ຊີວິດໃໝ່ຊຶ່ງນັບວັນນັບສວຍສົດງົດງາມກວ່າເກົ່າ. ປະຊາຊົນໂຊວຽດ ມີການຈັດຕັ້ງສູງ, ມີສະຕິຕື່ນຕົວສູງ, ຖືກສຶກສາອົບຮົມບົ່ມນ້ຳໃຈຮັກຊາດ ແລະ ຈົງຮັກພັກດີຕໍ່ອຸດົມການປະຕິວັດ ແລະ ຍັງມີພັກກອມມູນິດທີ່ສະຫງ່າອົງອາດເປັນຜູ້ນຳພາອີກດ້ວຍ. ຕີຊະນະປະຊາຊົນຄືແນວນີ້ຈະໄດ້ບໍ ? ບ້ານເກີດເມືອງນອນຂອງການປະຕິວັດໂລກ ເດັດຂາດຈະສູ້ຮົບຈົນເຖິງນາທີສຸດທ້າຍ. ພວກສະຫາຍຈົ່ງເຊື່ອໝັ້ນຄວາມເວົ້າ ຂອງຂ້າພະເຈົ້າທີ່ວ່າ: ໃນອີກບໍ່ຊ້າກອງທັບແດງໂຊວຽດຈະຕ້ານໂຈມຕີ ແລະ ຂັບໄລ່ພວກຟາດຊິດຈົນຮອດທີ່ໝັ້ນຂອງພວກເຂົາ".

ເວົ້າມາເຖິງນີ້ ເພິ່ນຢຸດໜ້ອຍໜຶ່ງ ແນມເບິ່ງຄົນຟັງໄປແຕ່ລະຄົນ ແລ້ວກໍ່ ສະຫລຸບຢ່າງເດັ່ງຂຶ້ນວ່າ:

"ວັນທີ່ປະຊາຊົນໂຊວຽດຍາດໄດ້ໄຊຊະນະຈະຕ້ອງກາຍເປັນສັນຍານໃຫ້ແກ່ການປະຕິວັດຫວຽດນາມ. ເພື່ອເຮັດໃຫ້ເວລານາທີອັນສະຫງ່າລາສີດັ່ງກ່າວຫຍັບເຂົ້າ ມາ ພວກເຮົາຈຶ່ງຕ້ອງສຸມເຫື່ອແຮງໃສ່ວຽກງານ".

ທ່ານວຽນອາຍກວັກ ຖືວຽກງານໂຄສະນາອົບຮົມຂວາຍ, ອົບຮົມສຶກສາແນວຄິດ ໃນໝູ່ມະຫາຊົນເປັນວຽກງານສຳຄັນທີ່ສຸດ, ເພິ່ນເນັ້ນໜັກຕໍ່ບັນດາສະຫາຍເລື້ອຍໆ ກ່ຽວກັບບັນຫາດັ່ງກ່າວ. ເພິ່ນມັກເນັ້ນຍ້ຳຄຳວ່າ "ໄຖເລີກເຂົ້າງານ". ເພື່ອກໍ່ສ້າງກຳລັງປະກອບອາວຸດຂອງປະຊາຊົນປະຕິວັດ, ເພື່ອກະກຽມພຸກເງື່ອນໄຂອັດຕະວິໄສ ອັນຈຳເປັນ ໃຫ້ແກ່ໄຊຊະນະຂອງການລຸກຮື້ຂຶ້ນປະກອບອາວຸດລະດັບທົ່ວປະເທດ, ກ່ອນອື່ນໝົດຕ້ອງມີກອງທະຫານໂຄສະນາອົບຮົມຂວາຍ, ກອງທະຫານການເມືອງ. ກ່ຽວກັບບັນຫາດັ່ງກ່າວ ເພິ່ນອ້າງເຖິງບົດຮຽນປະຫວັດສາດຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ .

ເພິ່ນຍົກເອົາສະໄຫມປະຫວັດສາດຂອງການປະຕິວັດລັດເຊຍ ນັບຕັ້ງແຕ່ລະດູຮ້ອນໄປຈົນຮອດເດືອນຕຸລາປີ ໑໙໑໗ ມາເປັນຕົວຢ່າງອັນຈະແຈ້ງທີ່ສຸດເຊິ່ງຊີ້ໃຫ້ເຫັນເຖິງປະສິດທິຜົນຂອງວຽກງານການເມືອງທີ່ມີເປົ້າຫມາຍອັນແນ່ນອນ. ໄລຍະນັ້ນເປັນໄລຍະທີ່ພັກໂບນເຊວິກພາຍໃຕ້ການນຳພາຂອງ ວ. ອີ. ເລນິນ ໄດ້ຮູ້ຈັກດຶງດູດເອົາມະຫາຊົນຊາວຜູ້ອອກແຮງງານຈຳນວນຫລວງຫລາຍມາຢູ່ຝ່າຍຕົນ, ໄດ້ຫັນເອົາສະພາໂຊວຽດ ຜູ້ແທນກຳມະກອນທະຫານແລະຊາວນາໄປຕາມແບບໂບນເຊວິກໃນທົ່ວທຸກແຫ່ງຂອງປະເທດລັດເຊຍ.

ເພິ່ນໃຫ້ຄຳແນະນຳ ແລະ ກວດກາຫົວຈັກຫລັກແຫລ່ງຂອງພັກດ້ວຍຕົນເອງ, ຄົນເຫລົ່ານີ້ຈະກັບຄືນທ້ອງຖິ່ນສອກຫລີກຂອງແຂວງກາວບັງ ແລະ ບັກການ, ລາງເຊີນ ທີ່ໃກ້ຄຽງ ຫລັງຈາກຮຽນຈົບຊຸດການເມືອງແລ້ວ ເພື່ອກໍ່ສ້າງຮາກຖານໃຫມ່ ແລະໂຄສະນາໃຫ້ຫວຽດມິນ.

"ສົມມຸດວ່າ ຂ້າພະເຈົ້າເປັນຊາວນາຄົນຫນຶ່ງທີ່ບໍ່ຮູ້ຫນັງສື, ສ່ວນພວກສະຫາຍແມ່ນຜູ້ມາເຮືອນຂ້າພະເຈົ້າ ເພື່ອຂົນຂວາຍເອົາຂ້າພະເຈົ້າໄປນຳການປະຕິວັດ", ເພິ່ນເວົ້າຂຶ້ນ, ແຕ່ດວງຕາຂອງເພິ່ນສ່ອງແວວຍິ້ມແບບຂີ້ຫລິ້ນອາດໃດອາດຫນຶ່ງ. "ວ່າເບິ່ງດູ, ສະຫາຍຈະເລີ່ມຈາກອັນໃດ..."

ນັກໂຄສະນາບາງຄົນຍັງບໍ່ຮູ້ຫນັງສື ຍິ່ງໄປກວ່ານັ້ນ ພວກເຂົາຍັງຖືກຫ້າມ ບໍ່ໃຫ້ຖືເອກະສານຫຍັງຕິດຕົວໄປນຳ, ເພາະວ່າມີຫລາຍເທື່ອທີ່ພວກເຈົ້າຫນ້າທີ່ຕຳຫລວດຍິງນັກໂຄສະນາຕາຍກັບທີ່ ພໍແຕ່ຄົ້ນພົບຫນັງສືພິມຫວຽດມິນ ຢູ່ໃນຕົວຂອງຜູ້ກ່ຽວ. ເພື່ອຊ່ວຍເຫລືອນັກໂຄສະນານັ້ນ ຫວຽດມິນອາຍກວັກ ຈຶ່ງແຕ່ງບົດກະວີ ສິບ ບົດ, ແຕ່ລະບົດມີຫົວຂໍ້ທີ່ແນໃສ່ເພື່ອໂຄສະນາຈຳເພາະແຕ່ລະຊຸມຄົນ: ພົນທະຫານ, ແມ່ຍິງ, ຜູ້ເຖົ້າຜູ້ແກ່, ພະສົງອົງຄະເຈົ້າ, ຜູ້ນັບຖືສາດສະຫນາເຍຊູ, ຊາວຫນຸ່ມ, ອື່ນໆ...

ທຸກຄົນທີ່ກັບຄືນມາປາກບໍ່ ພາຍຫລັງທີ່ສຳເລັດພາລະຫນ້າທີ່ ລ້ວນແຕ່ໄດ້ຖືກເຊີນໃຫ້ມາຕູບຂອງຫວຽດມິນອາຍກວັກ ແລະ ຖືກສະເຫນີໃຫ້ເລົ່າຄືນ ແຕ່ຕົ້ນຕະຫລອດ ປາຍກ່ຽວກັບເລື່ອງທີ່ວ່າ ພວກເຂົາໄດ້ເວົ້າຫຍັງແດ່ ແລະ ເວົ້າແນວໃດນຳປະຊາຊົນ ທ້ອງຖິ່ນ, ຍາດພີ່ນ້ອງມີປະຕິກິລິຍາຄືແນວໃດຕໍ່ສິ່ງທີ່ພວກເຮົາໂຄສະນາ ແລະ ສິ່ງໃສນຳບັນຫາໃດແດ່. ເມື່ອຟັງຈົບລົງແລ້ວ ເພິ່ນອະທິບາຍໃຫ້ພວກເຂົາຮູ້ບ່ອນຜິດພາດກັບທີ່. ເພິ່ນຕຳຫນິຢ່າງເຄັ່ງຂັມຕໍ່ຜູ້ທີ່ຖືເບົາຄວາມຮຽກຮ້ອງພື້ນຖານຂອງວຽກງານໂຄສະນາ ໃນຫມູ່ມະຫາຊົນ.

ເພິ່ນເວົ້າຢ່າງເຄັ່ງຂຶມວ່າ: "ຖ້າສະຫາຍແມ່ນຫົວຈັກຫລັກແຫລ່ງພັກ, ສະຫາຍກໍ່ຕ້ອງເປັນຄົນມີຄຸນສົມບັດປະຕິວັດຢ່າງແທ້ຈິງ ຕ້ອງໃຫ້ຫມູ່ຄົນເຊື່ອຫມັ້ນ ເຄົາລົບນັບຖື ແລະ ຮັກແພງສະຫາຍ. ຢາກໃຫ້ຫມູ່ຄົນເຊື່ອຫມັ້ນ ເວລາໃດສະຫາຍກໍ່ຕ້ອງຈິງໃຈແລະ ສັດຊື່ບໍລິສຸດໃນຫນ້າວຽກງານ. ຢາກໃຫ້ຫມູ່ຄົນນັບຖື, ສະຫາຍກໍ່ຕ້ອງຍອມຮ່ວມຮັບເຄາະກຳລວມນຳພວກເຂົາເຈົ້າ. ຢາກໃຫ້ຫມູ່ຄົນຮັກແພງ, ສະຫາຍກໍ່ຕ້ອງເຄົາລົບຜູ້ເຖົ້າ , ຮັກແພງຜູ້ຫນຸ່ມນ້ອຍ, ພົວພັນຢ່າງຖືກຕ້ອງກັບແມ່ຍິງ. ສຸດທ້າຍ, ເວລາໃດກໍ່ຕ້ອງ ຈົດຈຳ ແລະ ເຄົາລົບປະເພນີທ້ອງຖິ່ນ, ເຖິງວ່າປະເພນີດັ່ງກ່າວແປກປະຫລາດແນວໃດກໍ່ຕາມ. ຄືດັ່ງທີ່ປະຊາຊົນມັກເວົ້າຢູ່ເລື້ອຍໆວ່າ ບໍ່ເສຍສ່ວຍໃຫ້ເຈົ້າຊີວິດ ຍັງດີກວ່າບໍ່ນັບຖືຮີດບ້ານຄອງເມືອງ".

ບາງຄັ້ງຄາວຢູ່ລາຍງານປາກເປົ່າຂອງນັກໂຄສະນາຈຳນວນຫນຶ່ງ ມີແນວຄິດ ຫູຂະຫັດນິຍົມ, ພວກນີ້ບອກໃຫ້ຮູ້ວ່າ ພວກເຮົາເສຍແຮງໄປໂດຍໄຮ້ປະໂຫຍດ ຍ້ອນວ່າພໍ້ແຕ່ສ້າງຫົວຈັກຫລັກແຫລ່ງບາງຄົນໃຫ້ສະມາຄົມກູ້ຊາດຢູ່ຊົນນະບົດເທົ່ານັ້ນ. ທະຫານພ້າກະຕ່ຽວຂຽວ ກໍ່ມາປາບປາມ, ຂົ່ມຂູ່ ຫລືຈັບກຸມໂລດ. ຫລັງຈາກນັ້ນທາງທີ່ດີບໍ່ຄວນໄປໃຫ້ໄທບ້ານເຫັນຫນ້າ ເພາະວ່າຈະບໍ່ມີໃຜຢາກເວົ້ານຳ. ຫງວຽນອາຍກວັກ ໄດ້ສູ້ຊົນອະທິບາຍໃຫ້ນັກໂຄສະນາຜູ້ທີ່ຫມົດຫວັງດັ່ງກ່າວຮູ້ວ່າ:

"ອາດແບ່ງຜູ້ເປັນໃຈການປະຕິວັດອອກເປັນສາມຈຳພວກ. ຈຳພວກທີ່ຫນຶ່ງແມ່ນພວກທີ່ຫລັງຈາກກ້າວຂຶ້ນສູ່ເສັ້ນທາງແຫ່ງການຕໍ່ສູ້ ຍັງຄົງຈົງຮັກພັກດີຕໍ່ເສັ້ນທາງ ທີ່ຕົນເລືອກໄດ້ຈົນຕະຫລອດ. ຈຳພວກທີສອງແມ່ນຈຳພວກທີ່ໃນຕອນເລີ່ມຕົ້ນຄືວ່າໄດ້ ອຸທິດເຫື່ອແຮງທັງຫມົດຂອງຕົນໃຫ້ແກ່ພາລະກິດປະຕິວັດ, ແຕ່ຕໍ່ມາຍ້ອນຍ້ານການ ປາບປາມຂອງເຈົ້າຫນ້າທີ່ຕຳຫລວດ ຊ້ຳພັດກັບຕົນກັບຕົວ ປານວ່າຢູ່ໃນປີ້ຫອຍ. ຈຳພວກ ທີສາມ ກົງກັນຂ້າມ ແມ່ນຈຳພວກທີ່ເກີດມີຄວາມຄຽດແຄ້ນ ແລະ ມີກຳລັງໃຫມ່ ຕື່ມອີກຍ້ອນການປາບປາມ ແລ້ວພວກເຂົາເຈົ້າຈຶ່ງກາຍເປັນນັກປະຕິວັດຜູ້ຫ້າວຫັນກວ່າຫມູ່ . ຍ້ອນແນວນີ້ເອງ, ພວກເຮົາຈຶ່ງບໍ່ຕ້ອງຢ້ານການປາບປາມຂອງສັດຕູ, ເພາະວ່າ ອັນນີ້ຄືກັນກັບເຫລືອງກັ່ນຕອງ ຄົນອ່ອນແອຍ່ອມຕົກໄປ ສ່ວນວ່າຄົນເດັດດ່ຽວ ແລະ ຈົງຮັກພັກດີຕໍ່ການປະຕິວັດ ກໍຍັງຢູ່. ເຖິງແມ່ນວ່າຫລັງຈາກຄື້ນປາບປາມຜ່ານໄປແລ້ວ,ຖ້າວ່າໃນ ໑໐໐ ຄົນໃດຫາກຍັງເຫລືອແຕ່ສອງສາມຄົນທີ່ເປັນຫົວຈັກຫລັກແຫລ່ງຂອງສະມາຄົມ ກູ້ຊາດ, ສ່ວນຄົນອື່ນຍ້ານກົວ ແລະ ແຍກຕົວອອກ ກໍ່ຕາມ, ອັນນັ້ນບໍ່ສຳຄັນ. ສິ່ງສຳຄັນ

ຄືຕ້ອງຈັກຊວນໃຫ້ຫລາຍຄົນມີຄວາມເຊື່ອໝັ້ນວ່າ ການປະຕິວັດຈະມາເຖິງໃນເວລານຶ່ງ ນີ້. ຂະນະດຽວກັນ ຖ້າພວກເຂົາຫາກຍັງບໍ່ສາມາດຫລືຍັງບໍ່ກ້າໃກ້ຊິດພວກເຮົາ, ເຖິງຢ່າງໃດຫົວໃຈເຂົາກໍ່ຍັງອຽງໄປນຳການປະຕິວັດນັ້ນກໍ່ຖືວ່າໃຊ້ໄດ້. ພວກເຂົາ ແມ່ນຄົນທຸກຍາກ, ສະນັ້ນພວກເຂົາຈຶ່ງຄຽດແຄ້ນພວກລ່າເມືອງຂຶ້ນ ແລະ ສັກດີນາ, ຫົວໂຫຍຄອງຄອຍຢາກປົດປ່ອຍປະເທດຊາດ. ປານໃດເດສຽງຟ້າຮ້ອງບາດທຳອິດຂອງການຕໍ່ສູ້ປະຕິວັດຈະດັງຂຶ້ນ, ຮອດເວລານັ້ນພວກເຂົາຈະເດີນຕາມພວກເຮົາໂດຍທັນທີ.

ຫວງວຽນອາຍກວັກ ຖືວ່າວິທີເວົ້າຂອງຜູ້ເຮັດວຽກງານໂຄສະນາຢູ່ໃນມະຫາຊົນ ເປັນບັນຫາສຳຄັນບໍ່ໜ້ອຍ ເມື່ອເຫັນຫົວຈັກຫລັກແຫລ່ງຜູ້ໜຸ່ມນ້ອຍຂອງພັກທີ່ມົວເມົານຳການອ່ານປຶ້ມການເມືອງ ມັກເວົ້າໃຫ້ເຂົ້າໃຈຍາກ ແລະ ເປັນຄວາມເວົ້າທີ່ບໍ່ມີ ຄວາມໝາຍ ຫວງວຽນອາຍກວັກ ເຮັດສີໜ້າຄືຄົນເຈັບແຂ້ວ ຕັດຄວາມເວົ້າຂອງ "ນັກ ອ້າງໂວຫານ" ຂຶ້ນວ່າ:

"ສະຫາຍເອີຍ! ຂໍນຳສະຫາຍ, ບໍ່ຄວນໃຊ້ຄຳເວົ້າທີ່ມ່ວນ ແຕ່ບໍ່ມີຄວາມໝາຍ ບໍ່ຄວນໃຊ້ຄຳເວົ້າທີ່ບໍ່ມີເຫດຜົນ. ຢາກເປັນນັກໂຄສະນາແທ້ຈິງ ກໍ່ຕ້ອງຮຽນເອົາ ວິທີເວົ້າຂອງປະຊາຊົນ. ເຮັດໄດ້ຄືຈັ່ງຊັ້ນ ປະຊາຊົນຈຶ່ງຈະຟັງ. ເວລາເວົ້ານຳໃຜກໍ່ຕາມ ທຳອິດຕ້ອງພະຍາຍາມເວົ້າໃນສິ່ງທີ່ຢູ່ໃກ້ຊິດ, ຕິດແທດທີ່ສຸດກັບພວກເຂົາ, ໃນສິ່ງ ທີ່ກ່ຽວກັບພໍ່ແມ່, ລູກເຕົ້າເລົ່າກໍ່ຂອງພວກເຂົາ; ຖາມພວກເຂົາເບິ່ງວ່າຂາດເຂີນຫລາຍແທ້ບໍ ໃນການດຳລົງຊີວິດ, ຈາກນັ້ນຈຶ່ງຄ່ອຍໆກ້າວເຂົ້າສູ່ເລື່ອງທີ່ວ່າ ໃຜເປັນຜູ້ ເຮັດໃຫ້ຊີວິດຂອງພວກເຂົາອຶດຫິວ ແລະ ທຸກທໍລະມານ".

ຜູ້ໃດກໍ່ຕາມທີ່ເຮັດວຽກຄຽງບ່າຄຽງໄຫລ່ກັບ ຫວງວຽນອາຍກວັກ ຢູ່ປາກບໍ ລ້ວນແຕ່ຍັງຈື່ຈຳວ່າ ເພິ່ນເອງປະພຶດຕົວເປັນແບບຢ່າງໃຫ້ຜູ້ອື່ນ ເພື່ອໃຫ້ແຕ່ລະຄົນເຫັນວ່າເຮັດແນວໃດຈຶ່ງຈະດຳເນີນການໂຄສະນາຕົວຈິງ ແລະ ເຂົ້າໃຈໄດ້ຢ່າງງ່າຍດາຍໂດຍຄຳນຶງເຖິງຈຸດພິເສດຂອງທ້ອງຖິ່ນ. ພໍແຕ່ມາຮອດຖ້ຳກົກບໍ ໃນຕອນບ່າຍ ເທື່ອທຳອິດເພິ່ນໄດ້ສົນທະນາກັບພໍ່ເຖົ້າຜູ້ໜຶ່ງ ຄົນເຜົ່ານຸງ ຊື່ວ່າ ໄມລີ. ພໍ່ເຖົ້າໄມລີ ບໍ່ຮູ້ ພາສາຫວຽດນາມ ສະນັ້ນເວລາລົມກັນສອງຄົນຕ້ອງໃຊ້ດ້ວໄມ້ຂີດໄຟຂຽນຢູ່ເທິງໜ້າດິນ ເປັນໂຕໜັງສືແບບເປັນຮູບພາບ. ພໍ່ເຖົ້າໄມລີຈົ່ມທຸກຈົ່ມຍາກກ່ຽວກັບຊີວິດທຸກຍາກ ລຳເຄັນຊຶ່ງແມ່ນພວກພໍ່ບ້ານ ແລະ ເຈົ້ານາຍທ້ອງຖິ່ນເປັນຜູ້ສ້າງຂຶ້ນ ພວກເຂົາບໍ່ໄດ້ຫລຽວແລຫຍັງໝົດນຳປະຊາຊົນ, ມີແຕ່ເຮັດໃຫ້ປະຊາຊົນກູດທຽນແລະອ່ອນເພຍ. ຫວງວຽນອາຍ

ກວັກ ໄດ້ຊອກວິທີອະທິບາຍໃຫ້ພໍ່ເຖົ້າຮູ້ວ່າ ສັດຕູຕົ້ນຕໍຂອງປະຊາຊົນແມ່ນພວກລ່າເມືອງຂຶ້ນຜູ້ຮຸກຮານ, ສ່ວນພວກເຈົ້ານາຍທ້ອງຖິ່ນພຽງແຕ່ເປັນໄມ້ມືເທົ່ານັ້ນ. ແຕ່ພໍ່ເຖົ້າ ໄມ ລືຍັງບໍ່ເຫັນດີ. ຫຼັງຈາກທີ່ຄິດໜ້ອຍໜຶ່ງ ຫງວຽນອາຍກວັກ ກໍ່ຂີດຂຽນໂຕໜັງສື ຈີນ ເພື່ອອະທິບາຍໃຫ້ພໍ່ເຖົ້າເຂົ້າໃຈວ່າ:

"ສົມມຸດວ່າປະຊາຊົນເຮົາຄືຕົ້ນໄມ້, ພໍ່ບ້ານ ແລະ ເຈົ້ານາຍຄືຕະປູ, ສ່ວນພວກຝະລັ່ງຄືຄ້ອນຕີ. ຄ້ອນຕີຕອກຕະປູ ຕະປູຕິດກັບຕົ້ນໄມ້. ຈາກນັ້ນເພິ່ນກໍ່ຂີດເສັ້ນ ໄຂວ ຕັ້ງເທິງໂຕໜັງສືເປັນຮູບຄ້ອນຕີ ເພື່ອໃຫ້ແຈ້ງກວ່າ ເພິ່ນຊີ້ໄປໃສ່ພຸ່ມໄມ້ອັນດົກໜາ, ອາລິຍະບົດດັ່ງກ່າວເພື່ອອະທິບາຍວ່າ ເມື່ອເປັນແນວນັ້ນ ພວກຕະປູບໍ່ມີກຳລັງເທົ່າ ຕົ້ນໄມ້ອີກແລ້ວ".

ພໍ່ເຖົ້າຊົມເຜົ່ານຸງ ລູບໆຄຳໆປາຍໜວດເຫຼື້ອມເງົາງາມ ທັງຈົ່ມພຶມພຳ ທັງຄົ້ນຄິດ, ພໍ່ເຖົ້າເຜີຍຍິ້ມ ແລະ ງຶກຫົວເປັນເຊີງວ່າເຫັນດີ:

"ແມ່ນແທ້, ເຫດການມັນເປັນຄືຈັ່ງຊັ້ນ. ຫຼານເວົ້າຖືກຕ້ອງແລ້ວ. ສ່ວນພໍ່ເຖົ້າ ເຖົ້າແກ່ແລ້ວ ຈຶ່ງບໍ່ສາມາດຄິດອອກໄດ້".

໕

ສຳລັບຫງວຽນອາຍກວັກ ຊ່ວງໄລຍະທີ່ຢູ່ປາກບໍ່ ປຽບເໝືອນໄລຍະແຫ່ງຄວາມຮຸ່ງເຮືອງເປັນພິເສດ. ເພິ່ນທັງຂຽນ ທັງແປປຶ້ມຫຼາຍຫົວ, ຢູ່ໃນຕູບນອນຂອງເພິ່ນມັກມີສຽງດັງເຕາະໆແຕັກໆຂອງຈັກພິມດີດ.

ມື້ທຳອິດທີ່ມາຮອດ ປາກບໍ່ ເພິ່ນໄດ້ຕັ້ງບັນຫາກ່ຽວກັບຄວາມຈຳເປັນຕ້ອງຈັດພິມໜັງສືພິມສະບັບໜຶ່ງ ຂອງພັກ. ວຽກງານດັ່ງກ່າວຫຍຸ້ງຍາກທີ່ສຸດ, ໃນຈຳນວນ ອຸປະກອນການພິມທີ່ຈະຊອກໄດ້ກໍ່ມີແຕ່ນ້ຳມຶກດຳ ແລະ ຫີນລີໂຕເທົ່ານັ້ນ. ເຖິງຢ່າງໃດ ກໍ່ດີ ຈາກນັ້ນບໍ່ດົນ ໜັງສືພິມສະບັບໜຶ່ງທີ່ຊື່ວ່າ "ຫວຽດນາມເອກະລາດ", ເຊິ່ງເປັນກະບອກສຽງທາງການຂອງຫວຽດມິນກໍ່ໄດ້ຖືກຈັດພິມອອກ. ໜັງສືພິມໄດ້ຮັບຄຳຊົມເຊີຍ ທີ່ສຸດຈາກປະຊາຊົນທ້ອງຖິ່ນ ແລະ ໄດ້ເຜີຍແຜ່ຢ່າງກວ້າງຂວາງຢູ່ເຂດກອງຫຼອນ.

ທີ່ປາກບໍ່ ຫງວຽນອາຍກວັກ ຄົ້ນຄວ້າບັນຫາທິດສະດີການທະຫານຢ່າງລະອຽດຖີ່

ຖ້ອນ, ເພິ່ນເຊື່ອໝັ້ນວ່າ ອີງຕາມເງື່ອນໄຂຂອງຫວຽດນາມນັ້ນ ການປະຕິວັດ ຈະສາມາດມີໄຊໄດ້ ກໍຕໍ່ເມື່ອມະຫາຊົນຈັບອາວຸດລຸກຮື້ອນ. ເພິ່ນໄດ້ແປປຶ້ມ "ວິຊາການ ທະຫານ" ຂອງໂຕນຕິ ນັກການທະຫານຈີນສະໄໝກາງ ອອກເປັນພາສາຫວຽດ, ເພິ່ນຂຽນປຶ້ມນ້ອຍຫລາຍຫົວ ທີ່ເວົ້າກ່ຽວກັບຍຸດທະວິທີ ໃນສົງຄາມກອງຫລອນ ແລະ ວິທີອົບຮົມກໍ່ສ້າງຜູ້ບັນຊາການທະຫານ. ຄືກັນກັບໜັງສືພິມ "ຫວຽດນາມເອກະລາດ" ບັນດາປຶ້ມນ້ອຍເຫລົ່ານັ້ນ ໄດ້ຖືກພິມດ້ວຍລິໂຕ ແລະ ຈັດເປັນປຶ້ມປະເພດຕິດຕົວ ແລະ ໄດ້ຖືກແຈກຢາຍຢູ່ໃນໝູ່ບັນດານັກຮັກຊາດ.

ໃນຈຳນວນວັນນະກຳທີ່ຫງວຽນອາຍກວັກຂຽນຢູ່ປາກບໍ່ ມີປຶ້ມປະຫວັດສາດ ສອງຫົວທີ່ມີລັກສະນະພິເສດທາງດ້ານຮູບການ ແລະ ເນື້ອໃນ. ປຶ້ມທັງສອງຫົວ ຂຽນເປັນກອນ ຕາມລັກສະນະຂຽນກອນອັນເປັນມູນເຊື້ອຂອງປະຊາຊົນຫວຽດນາມ. ປຶ້ມຫົວທີໜຶ່ງ ທີ່ໃສ່ຊື່ວ່າ "ປະຫວັດສາດປະເທດເຮົາ" ໄດ້ຖືກຂຽນຂຶ້ນແຕ່ຊຸມປີທີ່ຜູ້ຂຽນຍັງຮຽນຢູ່ສະຫະພາບໂຊວຽດ, ປຶ້ມນີ້ພັນລະນາເຖິງເຫດການສຳຄັນຂອງປະຫວັດສາດຫວຽດ - ນາມ, ນັບຕັ້ງແຕ່ສະໄໝເຈົ້າຊີວິດຮົງບັງ ຈົນຮອດເວລາທີ່ພວກຮຸກຮານຝະລັ່ງ ຕີບຽດຍຶດຫວຽດນາມ. ແນວຄິດສຳຄັນຂອງປຶ້ມຫົວນີ້ ແມ່ນດັ່ງຕໍ່ໄປນີ້: ເວລາໃດປະຊາຊົນຫວຽດນາມສາມັກຄີກັນແໜ້ນໃນການຕໍ່ສູ້ກູ້ຊາດ ເວລານັ້ນພວກເຂົາໄດ້ຮັບໄຊຊະນະ ; ກົງກັນຂ້າມ, ເວລາໃດເສຍຄວາມສາມັກຄີ ເວລານັ້ນພວກເຂົາປະລາໄຊ ຢ່າງເຈັບແສບ. ໂດຍຍ້ອງຍໍຊົມເຊີຍພວກຂຸນພົນຫວຽດນາມສະໄໝກ່ອນນັ້ນ ເພິ່ນເນັ້ນວ່າ ທຸກໆໄຊຊະນະຂອງພວກຂຸນພົນເຫລົ່ານັ້ນ ແມ່ນຜົນທີ່ໄດ້ຮັບຈາກການຮູ້ຈັກຊັກຈູງມະຫາຊົນ.

ປຶ້ມຫົວທີສອງ ທີ່ໃສ່ຊື່ວ່າ "ປະຫວັດສາດຫວຽດນາມແຕ່ປີ ໑໘໔໗ ເຖິງປີ໑໙໔໗" ພົ້ນເດັ່ນດ້ວຍສິ່ງທີ່ວ່າ ມັນປະກອບດ້ວຍຕາຕະລາງລຳດັບເຫດການ ຊຶ່ງຜູ້ແຕ່ງ ໄດ້ຂຽນດ້ວຍຕົນເອງ ໃນນັ້ນເພິ່ນຈັດວາງບາງເຫດການສຳຄັນໃນປະຫວັດສາດຫວຽດນາມ ໃນຊ່ວງໄລຍະເກືອບ ໑໐໐ ປີທີ່ຕົກຢູ່ໃຕ້ແອກຄອບຄອງຂອງພວກລ່າເມືອງຂຶ້ນຝະລັ່ງ. ເປັນທີ່ໜ້າສັງເກດວ່າ ຕາຕະລາງລຳດັບເຫດການໄດ້ຖືກຂຽນຂຶ້ນໃນປີ ໑໙໔໒, ແຕ່ວ່າ ຢູ່ໃນຕາຕະລາງດັ່ງກ່າວໄດ້ຂຽນເຫດການລຳດັບສຸດທ້າຍໄວ້ດັ່ງນີ້: ປີ ໑໙໔໕ ເປັນປີ ທີ່ຫວຽດນາມຈະຍາດເອົາເອກະລາດ. ສະຫາຍຫວູແອັງ ໄດ້ເລົ່າຄືນກ່ຽວກັບ ເຫດການດັ່ງກ່າວດັ່ງຕໍ່ໄປນີ້: "ລຸງໄດ້ຂຽນໄວ້ໃນຕອນທ້າຍຕາຕະລາງວ່າ ຫວຽດນາມ ຈະຍາດເອົາເອກະລາດໃນປີ ໑໙໔໕. ຫລັງຈາກອ່ານຕາຕະລາງດັ່ງກ່າວນັ້ນແລ້ວ ບັນດາສະ

ທາຍໄດ້ຖືກຖຽງກັນຮອບອັນທີ່ດັ່ງກ່າວນີ້ຢ່າງເຜັດຮ້ອນ. ມີສະຫາຍບາງຄົນກັງວົນວ່າຈະຕ້ອງລໍຖ້າດົນເຖິງປານນັ້ນຊັ້ນບໍ ? ອີກຈຳພວກໜຶ່ງຊ້ຳພັດຖືວ່າ ອັນທີ່ດັ່ງກ່າວໄວໂພດ. ສ່ວນລຸງ ເມື່ອໄດ້ຟັງການສົນທະນາກໍ່ເວົ້າຂຶ້ນວ່າ: "ຄົນຊັ້ນເບິ່ງໄປ ຫາກຈະເຫັນ".

ໃນຕອນທ້າຍຂອງປຶ້ມຫົວນີ້ ທ່ານຂຽນອາຍກວັກ ໄດ້ຂຽນວ່າ: "ຊາດໜຶ່ງທີ່ເຕັມໄປດ້ວຍນ້ຳໃຈຮັກຊາດອັນສູງສົ່ງ ຄືຊາດຫວຽດນາມນີ້, ເດັດຂາດຈະຕ້ອງມີເອກະລາດ ແລະ ມີເອກະພາບ". ສາມປີຕໍ່ຈາກນັ້ນ ການຄາດຄະເນດັ່ງກ່າວນີ້ໄດ້ກາຍເປັນຄວາມຈິງ. ເຖິງຢ່າງໃດກໍດີ ປະຊາຊົນຫວຽດນາມກໍ່ຈຳເປັນຕ້ອງກຳປືນຕໍ່ສູ້ຍືດເຍື້ອຍາວນານອີກເກືອບ ໒໐ ປີ ພາລະກິດສ້າງຄວາມເປັນເອກະລາດ ແລະ ຄວາມເປັນເອກະພາບຈຶ່ງປະກົດເປັນຈິງຢ່າງສົມບູນ.

ເວລາຖືກຄຸມຂັງ

໑

ຫລັງຈາກທີ່ພວກຍີ່ປຸ່ນເຂົ້າຍຶດຄອງຫວຽດນາມແລ້ວ, ຂະບວນການຮັກຊາດໄດ້ພົບອໍ້ຫຍຸ້ງຍາກໃຫມ່ນາໆປະການ. ການຕິດຕໍ່ອັນປົກກະຕິ ລະຫວ່າງພາກໃຕ້ ກັບພາກເຫນືອ ກໍຖືກຕັດຂາດ. ອັນຮ້າຍແຮງທີ່ສຸດກໍ່ແມ່ນວ່າ ກຳລັງຮັກຊາດໄດ້ຂາດການພົວພັນກັບໂລກພາຍນອກ, ສະພາບການດັ່ງກ່າວ ຍິ່ງໄດ້ສ້າງສິ່ງກີດຂວາງຫລາຍກວ່ານັ້ນອີກ. ບາງຄັ້ງບາງຄາວ ຫງວຽນອາຍກວັກ ແລະ ເພື່ອນຮ່ວມຮົບຂອງເພິ່ນ ບໍ່ອາດວາດພາບອອກໄດ້ຢ່າງຈັດເຈນວ່າ ສະພາບການສູ້ຮົບ ຢູ່ທີ່ສະຫນາມຮົບຂອງສົງຄາມໂລກ ຄັ້ງທີສອງນັ້ນ ດຳເນີນໄປຄືແນວໃດ, ກ່ອນອື່ນຫມົດ, ຂະບວນການຕໍ່ຕ້ານຍີ່ປຸ່ນ ຂອງປະຊາຊົນຈີນ ຂະຫຍາຍຕົວຢູ່ໃນລະດັບໃດ. ນອກນັ້ນເພື່ອຕໍ່ສູ້ກັບພວກຍີ່ປຸ່ນຜູ້ຮຸກຮານແລະພວກວິຊີຜູ້ເປັນລູກແຫລ້ງຂອງມັນໃຫ້ໄດ້ຮັບໄຊຊະນະ, ຫວຽດມິນ ທີ່ເປັນຕົວແທນຜູ້ມີອຳນາດເຕັມຂອງປະຊາຊົນຫວຽດນາມຈຶ່ງຕ້ອງການການຊ່ວຍເຫລືອທາງດ້ານວັດຖຸ ກໍເຊັ່ນດຽວ

ກັນກັບທາງດ້ານການເມືອງ ຈາກມະຫາອຳນາດໃນຝ່າຍພັນທະມິດທີ່ຕ້ານຟາດຊິດ. ການຊ່ວຍເຫລືອທາງດ້ານວັດຖຸ ແມ່ນຈຳເປັນເປັນພິເສດ ຍ້ອນວ່າໜ່ວຍກອງຫລອນທີ່ໄດ້ຖືກສ້າງຕັ້ງຂຶ້ນ ໃນເຂດພູຜາປ່າດົງສອກຫລີກ ກາວບັງ–ລາງເຊີນ–ບັກການ ນັ້ນໃນຕົວຈິງແລ້ວບໍ່ມີອາວຸດຕໍ່ສູ້. ປະການສຸດທ້າຍ, ມີຄວາມຈຳເປັນຕ້ອງຟື້ນຟູສາຍພົວພັນ ກັບອົງການຈັດຕັ້ງຕ່າງໆຂອງຄົນຫວຽດນາມຕ່າງດ້າວ ທີ່ອາໄສຢູ່ພາກໃຕ້ຈີນ ແລະ ຕ້ອງຊອກທຸກວິທີດຶງດູດເອົາເຂົາເຈົ້າເຂົ້າມາຢູ່ໃນຫວຽດມິນ.

ສະຫລຸບຄວາມແລ້ວ ສະພາບການໃນເວລານັ້ນຮຽກຮ້ອງໃຫ້ສົ່ງຜູ້ຕາງໜ້າ ທີ່ມີອິດທິພົນຂອງຫວຽດມິນ ໄປຍັງຈີນໂດຍດ່ວນ ຊຶ່ງຈະສາມາດສຳເລັດໜ້າທີ່ດັ່ງກ່າວໄວ້ ຢູ່ເທິງນັ້ນ. ສຳລັບຜູ້ທີ່ຈະໄປ ບັນຫາດັ່ງກ່າວບໍ່ຈຳເປັນຖົກຖຽງກັນແລ້ວ ມີແຕ່ ຫວຽນ-ອາຍກວັກຄົນດຽວເທົ່ານັ້ນ ແມ່ນບຸກຄົນສຳຄັນທີ່ມີຄວາມເໝາະສົມສຳລັບການຕິດຕໍ່ແລະດຳເນີນການເຈລະຈາກັບຜູ້ຕາງໜ້າຄົນໃດຄົນໜຶ່ງຂອງທຸກໆປະເທດ, ຍິ່ງໄປກວ່ານັ້ນ ຍັງເປັນຜູ້ທີ່ຮູ້ຊອດປອດໂປ່ງກ່ຽວກັບເງື່ອນໄຂອັນສັບສົນຂອງຈີນ.

ທ້າຍເດືອນສິງຫາ ປີ ໑໙໔໔ ຫວຽນອາຍກວັກ ເຊີນສະຫາຍ ຫວູແອັງ ມາພົບ ແລະ ບອກວ່າ:

"ຂໍໃຫ້ອາວຊ່ວຍເຮັດກາປະທັບສອງອັນໃຫ້ຂ້ອຍແດ່: ອັນໜຶ່ງແມ່ນຂອງ ຫວຽດມິນ, ອີກອັນໜຶ່ງເປັນຂອງ..." ເພິ່ນຢຸດໜ້ອຍໜຶ່ງ, ຈາກນັ້ນຈຶ່ງເວົ້າຕໍ່, "ແມ່ນຂອງພະແນກຫວຽດນາມ ທີ່ສັງກັດສັນນິບາດສາກົນເພື່ອຕໍ່ສູ້ຕ້ານການຮຸກຮານ".

ເພິ່ນຂຽນຈົດໝາຍແນະນຳ ໃນນາມອົງການຈັດຕັ້ງດັ່ງກ່າວ ມາຂ້າງເທິງນັ້ນ ເປັນພາສາຈີນ ແລະ ພາສາຝະລັ່ງ ໃນເວລານັ້ນໂລດ, ຜູ້ທີ່ຖືຈົດໝາຍແມ່ນ ຄົນຈີນຕ່າງດ້າວຢູ່ຫວຽດນາມ ເຊິ່ງຈະກັບຄືນປະເທດຈີນ ເພື່ອໄປພົບຜູ້ຕາງໜ້າຂອງລັດຖະບານ ຈູງແອັງ. ເວລານັ້ນລັດຖະບານຈຽງໄຄເຊັກ ຕັ້ງຢູ່ນະຄອນດັ່ງກ່າວ. ເພື່ອລວງຕາພວກນັກສືບສອດແນມຝະລັ່ງ ແລະ ຍີ່ປຸ່ນ ເພິ່ນໃສ່ຊື່ໃໝ່ຢູ່ໃນຈົດໝາຍວ່າໂຮ່ຈີມິນ. ນັບຕັ້ງແຕ່ນັ້ນຕໍ່ໄປ ຢູ່ໃນການເຄື່ອນໄຫວປະຕິວັດຊື່ຫວຽນອາຍກວັກ ນັ້ນໄດ້ກາຍເປັນອະດີດໄປແລ້ວ. ໄລຍະໃໝ່ໃນຊີວະປະຫວັດຂອງເພິ່ນໄດ້ເລີ່ມຂຶ້ນແລ້ວ. ດ້ວຍຊື່ ໂຮ່ຈີມິນ ເພິ່ນມີຊື່ສຽງດັງກ້ອງທົ່ວໂລກ ໃນນາມເປັນຜູ້ນຳການປະຕິວັດຫວຽດນາມ, ເປັນຜູ້ນຳພາຊາວກອມມູນິດຫວຽດນາມ ແລະ ການຕໍ່ສູ້ປົດປ່ອຍຊາດ, ແລະ ປົດປ່ອຍສັງຄົມຂອງປະຊາຊົນຫວຽດນາມ.

ວັນທີ ໒໙ ເດືອນສິງຫາ ປີ ໑໙໔໘ ໂຮ່ຈີມິນ ອອກເດີນທາງ ຮ່ວມກັບສະຫາຍ ພາຫາງສອງຄົນ. ເພື່ອປ້ອງກັນໄວ້ລ່ວງໜ້າ ເຂົາເຈົ້າຍ່າງພໍໃຜພໍລາວ, ໂດຍປະໄລຍະຫ່າງກັນບໍ່ໄກປານໃດ ເພື່ອໃຫ້ສາມາດແນມເຫັນກັນໄດ້. ສ່ວນໂຮ່ຈີມິນປອມຕົວເປັນຜູ້ເຖົ້າເຜົ່ານຸງ, ຕາຟາງ, ມືຖືໄມ້ຄ້ອນເທົ້າຍ່າງຕາມຫລັງໝູ່. ພາຍຫລັງທີ່ເລັດລອດຂ້າມຊາຍແດນໄດ້ສຳເລັດ, ພວກເຂົາເຈົ້າໄດ້ຕິດຕໍ່ກັບຄົນທ້ອງຖິ່ນຜູ້ໜຶ່ງຊຶ່ງແທ້ຈິງແລ້ວເປັນຜູ້ອາວຸໂສ ຂອງພັກກອມມູນິດຈີນ. ຈາກບ່ອນນີ້ໄປ ໂຮ່ຈີມິນ ໄດ້ຖືກພາ ທາງໂດຍຄົນຈີນຜູ້ນີ້. ເມື່ອມາຮອດຕົວເມືອງ ຈຽນຕັງ, ທັງສອງຄົນພັກແຮມຄືນຢູ່ຫໍພັກຊົ່ວຄາວ. ຂ້ອນຄືນວັນນັ້ນບັນດານັກສືບຂອງ ຈຽງໄຄເຊັກ ກໍໄດ້ບຸກເຂົ້າໄປໃນຫ້ອງຂອງພວກເຂົາຢ່າງກະທັນຫັນ, ແລ້ວມັດສອກທັງສອງຄົນນຳຕົວໄປ.

ໜຶ່ງເດືອນກວ່າ ພວກທີ່ຢູ່ປາກບໍ່ ບໍ່ຮູ້ຫຍັງເລີຍກ່ຽວກັບໂຊກຊາຕາຂອງ ໂຮ່ຈີ-ມິນ. ສະຫາຍຈຳນວນໜຶ່ງຖືກສົ່ງໄປຈີນ ເພື່ອຊອກຫາເພິ່ນ. ມື້ໜຶ່ງ ມີຄົນຜູ້ໜຶ່ງ ນຳເອົາໜັງສືພິມທ້ອງຖິ່ນຈີນສະບັບໜຶ່ງມາປາກບໍ່. ໜັງສືພິມສະບັບນີ້ໂຮ່ຈີມິນ ໄດ້ຝາກຜ່ານຄົນຍາມທີ່ຖືກຊື້ຈ້າງຢູ່ຄຸກ ຫວຽວເຈົາ. ເມື່ອເອົານ້ຳຢາເຄມີມາທາທີ່ແຄມ ແຜ່ນເຈ້ຍໜັງສືພິມໂຕໜັງສືທີ່ຂຽນດ້ວຍນ້ຳເຂົ້າກໍປະກົດຕົວອອກເທື່ອລະເລັກເທື່ອລະນ້ອຍ. ພາຍລູນມາ ໜັງສືພິມປະເພດດຽວກັນ ກໍຖືກສົ່ງມາທີ່ປາກບໍ່ ເກືອບແຕ່ລະອາທິດ.

ໃນເບື້ອງຕົ້ນ ເພິ່ນຖືກຂັງໃນຄຸກຂອງນະຄອນນານນິງ ແຂວງກວາງໄຕ ຫລັງຈາກຖືກຂັງໄດ້ສອງສາມມື້, ມີນັກກໍ່ກວນບັກໜຶ່ງລາຍງານຕໍ່ຫົວໜ້າຄຸກວ່າ ນັກໂທດ ທີ່ມາຢູ່ໃໝ່ໄດ້ "ໂຄສະນາກອມມູນິດ" ໃນຫ້ອງຂັງ. ຄົນຍາມຄຸກໄຊ້ຄ້ອນເທົ້າຕີນັກໂທດທີ່ມີອາຍຸສູງຄົນນີ້ສົບບາດ ຈົນເພິ່ນລຸກບໍ່ຂຶ້ນ, ຈາກນັ້ນເພື່ອແຍກຄົນແປກໜ້າທີ່ອັນຕະ-ລາຍດັ່ງກ່າວ ພວກເຂົາຈຶ່ງຍ້າຍເພິ່ນໄປຂັງໄວ້ຢູ່ຄຸກອື່ນ. ແຕ່ຕິງໄຕ ໄປທຽນບາວຈາກນັ້ນໄປລອງຕວຽນ, ດຽນດົງ, ກວາດິກ, ດົງຈິງ, ນານນິງ, ລາຍເຕິນ, ຫລຽວເຈົາ, ເກວເລີມເປັນລຳດັບ ຈາກນັ້ນກໍກັບຄືນມາທີ່ ຫລຽວເຈົາ. ມັນຫາກເປັນຄື ຈັ່ງຊັ້ນ, ໂຮ່ຈີມິນ ຍ້າຍໄປຍ້າຍມາ ຢູ່ໃນຄຸກຕັ້ງສາມສິບແຫ່ງໃນສິບສາມຕົວເມືອງ ຂອງແຂວງກວາງໄຕ. ຈາກບ່ອນກັກຂັງແຫ່ງນີ້ຍ້າຍໄປບ່ອນກັກຂັງອື່ນ ເພິ່ນຕ້ອງຍ່າງ ຢູ່ຄໍໃສ່ຄາ ມີທະຫານຄວບຄຸມໄປນຳ ຕາມເສັ້ນທາງຂຶ້ນພູ, ຜ່ານບວກໜອງຄອງບຶງ ໃຕ້ແສງແດດກ້າແຂດອາກາດຮ້ອນ ແລະ ຫ່າຝົນແຮງ. ນັບເປັນເວລາຫລາຍເດືອນທີ່ຕ້ອງຈັດເຊພະເນຈອນຈາກຄຸກນີ້ຍ້າຍໄປຢູ່ຄຸກອື່ນ, ຜົມຂອງເພິ່ນກໍຫງອກໝົດແລ້ວ, ແຂ້ວ

ເພິ່ນກໍຄອຍ ແລະ ຫລິ້ນເທື່ອລະນ້ອຍ.

ສຳລັບ ໂຮຈິມິນ ໔໐໐ ມື້ ທີ່ຢູ່ໃນຄຸກຕ່າງໆຂອງ ຈຽງໄຄເຊັກ ເພິ່ນມີຄວາມຮູ້ສຶກວ່າ ໃນແຕ່ລະມື້ ມີຄວາມທຸກທໍລະມານ ຢ່າງບໍ່ສິ້ນສຸດ. ຢູ່ໃນຫ້ອງຂັງມີແຕ່ຄວາມອຶບເອົ້າ, ຕຽງໄມ້ປູດ້ວຍເຟືອງເປື້ອນ, ຄາບເຂົ້າສວາຍ ມີແຕ່ແກງຖ້ວຍໜຶ່ງ ກັບນ້ຳຊຸ່ມໆຈອກໜຶ່ງ, ການຂ້ຽນຕີ ແລະ ຄວາມເວົ້າດ່າ ສຽດສີຂອງຄົນຍາມ ທັງໝົດນັ້ນ ແມ່ນຊີວິດປະຈຳວັນ ຂອງຕະຫລອດໄລຍະອັນຍາວນານ. ແຕ່ວ່າໃນສະພາບອັນມືດມົນດັ່ງກ່າວ ຢູ່ຄຸກ ຫລຽວເຈົາ ມື້ໜຶ່ງຂອງເດືອນ ກຸມພາ ປີ ໑໙໔໓ ເປັນມື້ ທີ່ສະຫລັກເລິກໄວ້ຢູ່ໃນຫົວໃຈຂອງ ໂຮຈິມິນ ຄ້າຍຄືກັນ ກັບແສງຟ້າແມບເຫລື້ອມກາງເດືອນມືດ ໃນຂອດອາກາດຮ້ອນ. ທະຫານຍາມຜູ້ໜຶ່ງ ທີ່ມີຄວາມຮູ້ສຶກເປັນມິດກັບເພິ່ນ ໄດ້ຊຸກເຊື່ອງໜັງສືພິມທ້ອງຖິ່ນສະບັບໜຶ່ງ ມາໃຫ້ເພິ່ນອ່ານ, ໜັງສືພິມສະບັບນັ້ນມີຊື່ວ່າ "ຫລຽວເຈົາ ລາຍວັນ". ເພິ່ນ ຮັບເອົາໜັງສືພິມດັ່ງກ່າວ, ເປີດອອກອ່ານໜ້າທຳອິດ ແລ້ວກໍຕັ້ນຂຶ້ນດ້ວຍຄວາມດີອົກດີໃຈ ຈົນຫົວເກືອບຕຳໃສ່ຂື່ເຮືອນຕ່ຳໆນັ້ນ, ໜັງສືພິມອອກຂ່າວດ້ວຍຫົວຂໍ້ໃຫຍ່ວ່າ ຫລັງຈາກຫົກເດືອນ ແຫ່ງການຕໍ່ສູ້ອັນດຸເດືອດທີ່ສຸດແລ້ວ ກອງທັບແດງ ໂຊວຽດ ຍາດເອົາໄຊຊະນະ ມາໄດ້ ໃນບັ້ນຮົບຢູ່ ສະຕາລິນກະຣາດ, ໄດ້ດັບສູນ, ທຳລາຍ ແລະ ຈັບເປັນຊະເລີຍ ໓໓໐.໐໐໐ ຄົນ, ໃນນັ້ນມີທັງນາຍ ແລະ ພົນທະຫານຂອງກອງທັບ ຮິດແລ. "ເຫັນບໍ ! ຂ້ອຍຄິດແລ້ວບໍ່ມີຜິດ. ເວລາປົດປ່ອຍ ຂອງພວກເຮົາໄດ້ຫຍັບເຂົ້າມາໃກ້ແລ້ວ !", ຄວາມຄິດປາບປື້ມດີໃຈດັ່ງກ່າວ ພຸ່ງຕົວຂຶ້ນມາໃນມັນສະໝອງເພິ່ນ.

ເຫດການດັ່ງກ່າວ ຄວນໄດ້ຮັບການສະເຫລີມສະຫລອງ. ໂຮຈິມິນ ມີເງິນຫລຽນໜຶ່ງປ່ອນ ຊຶ່ງໄດ້ເຊື່ອງຢ່າງລີ້ລັບໄວ້ ໃນຖົງເສື້ອຂາດສ້ອຍ ແລະ ຮັກສາໄວ້ໄດ້ ຢ່າງໜ້າແປກປະຫລາດ ໂດຍບໍ່ຕົກເຮ່ຍເສຍຫາຍ ເພິ່ນເອີ້ນຄົນຍາມມາຫາ ແລະຂໍຮ້ອງນຳເອົາ ໃຫ້ຊ່ວຍຊື້ເຂົ້າໜົມຖົ່ວດິນສອງສາມກ້ອນ, ເຂົ້າໜົມອົມ ແລະ ຊາອົບດອກຊ່ອນແດ່ລັກນ້ອຍມາຈາກໃນເມືອງ. ຕົກຄ່ຳມາ, ເມື່ອຈັດແຈງເອົາຊາໃສ່ເຕົ້າ ຮຽບຮ້ອຍແລ້ວ ໂຮຈິມິນ ກໍຊູກຳປັ້ນເບື້ອງຂວາສູງຂຶ້ນ ຄິດລຳພຶງໃນໃຈ:

"ພັກໂບນເຊວິກ ຈົ່ງໝັ້ນຍືນ ! ກອງທັບແດງຈົ່ງໝັ້ນຍືນ ! ໄຊຊະນະ ທີ່ຍິ່ງໃຫຍ່ຂອງປະເທດລັດເຊຍ ໂຊວຽດ ໝັ້ນຍືນ !"

ຂໍ້ຄວາມສັ້ນໆຂອງໂຮຈິມິນ ທີ່ຂຽນຢູ່ຂອບໜັງສືພິມຊີ້ໃຫ້ເຫັນວ່າ ການທີ່ອຳນາດປົກຄອງກວາງໄຕ ຈັບເພິ່ນຍ້ອນສົງໄສວ່າເພິ່ນແມ່ນຄົນຈີນທໍລະຍົດທີ່ປອມຕົວມາ. ໃນເວລາຕໍ່ໆມາ ຈຶ່ງຮູ້ໄດ້ຢ່າງຄັກແນ່ວ່າ ການທີ່ໂຮຈິມິນ ຖືກຈັບແນ່ນອນວ່າເປັນຍ້ອນ ເຈົ້າຂອງໂບຍກົງ ກັບພັກພວກຂອງເຂົາເປັນຜູ້ປັ້ນເລື່ອງຂຶ້ນ, ເພາະວ່າພວກເຂົາຢ້ານຫລາຍ ທີ່ສູດວ່າການປະກົດຕົວຂອງຜູ້ຕາງໜ້າຜູ້ໜຶ່ງ ທີ່ໜ້າເຊື່ອຖືຂອງຫວຽດມິນ ອາດຈະ ສົ່ງຜົນສະທ້ອນອັນບໍ່ດີຕໍ່ຖານະຂອງພວກເຂົາ ໃນໝູ່ຊາວຫວຽດນາມຕ່າງດ້າວ.

ມີແຕ່ຈູງແຂັງ ເທົ່ານັ້ນຈຶ່ງຈະຊ່ວຍໂຮຈິມິນ ໃຫ້ຫລຸດພົ້ນອອກຈາກທີ່ກັກຂັງ. ຄະນະປະຈຳສູນກາງພັກກອມມູນິດອິນດູຈີນ ປຸກລະດົມຂະບວນການຢູ່ພາຍໃນສະມາຄົມ ກູ້ຊາດຢູ່ເຂດ ຫວຽດບັກ ກໍຄືຢູ່ໃນໝູ່ຊາວຫວຽດນາມຕ່າງດ້າວ ທີ່ອາໄສຢູ່ພາກໃຕ້ ຈີນ ທວງໃຫ້ປົດປ່ອຍໂຮຈິມິນ ເປັນອິດສະຫລະ. ຈົດໝາຍ ແລະ ຄຳປະທ້ວງ ເປັນຮ້ອຍໆ ສະບັບ ທີ່ຖືກສົ່ງໄປຫາ ຈູງແຂັງ ບັນຈຸຂໍ້ຮຽກຮ້ອງ ໃນທຳນອງນີ້ແຫລະ. ໜັງສືພິມ "ຫວຽດນາມເອກະລາດ" ທີ່ພິມຈຳໜ່າຍຢູ່ ປາກບໍ່ ໄດ້ອອກສະບັບພິເສດທີ່ລົງຄຳຮຽກຮ້ອງເຖິງປະຊາຊົນຈີນ "ຈົ່ງໃຫ້ການຊ່ວຍເຫລືອໃນການປ່ອຍນັກຮັກຊາດ ຜູ້ອາວຸໂສຫວຽດນາມຄົນໜຶ່ງ ໃຫ້ເປັນອິດສະຫລະ". ຄຳຮຽກຮ້ອງດັ່ງກ່າວຍັງໄດ້ສົ່ງໄປເຖິງສາກົນກອມມູນິດ, ສຳນັກຂ່າວສານໂຊວຽດ, ໜັງສືພິມຈີນຫລາຍສະບັບ ອົງການ ຈັດຕັ້ງປະຊາທິປະໄຕຕ່າງໆ ແລະ ນັກເຄື່ອນໄຫວການເມືອງຂອງຈີນ.

ວັນໜຶ່ງ ລະຫວ່າງກາງປີ ໑໙໔໓, ສະຫາຍ ກາບ ນັກຕິດຕໍ່ຄົນໜຶ່ງຂອງ ພັກ ໄດ້ກັບຄືນມາປາກບໍ່ ພ້ອມທັງນຳເອົາຂ່າວເສົ້າສະຫລົດໃຈມາແຈ້ງວ່າ: ໂຮຈິມິນ ເຈັບໜັກ ແລະ ຕາຍຢູ່ໃນຄຸກ. ຜູ້ໃຫຍ່ຜູ້ໜຶ່ງຂອງພັກກົກມິນຕັງໄດ້ບອກຂ່າວດັ່ງກ່າວສູ່ເຂົາຟັງ. ຄວາມຮູ້ສຶກໂສກເສົ້າຂອງເພື່ອນມິດ, ສະຫາຍ ແລະ ຂອງປະຊາຊົນປາກບໍ່ ໃນເວລາທີ່ໄດ້ຮັບຂ່າວດັ່ງກ່າວ ເປັນຄວາມຮູ້ສຶກທີ່ບໍ່ອາດບັນຍາຍໄດ້. ພາຍຫລັງສົນທະນາກັນດົນສົມຄວນ ພວກເຂົາຕັດສິນໃຈຈັດຕັ້ງພິທີໄວ້ອາໄລເຖິງຫງວຽນອາຍກວັກ ໝາຍຄວາມວ່າເຖິງໂຮຈິມິນນັ້ນເອງ. ສະຫາຍຟາມວັນດົງ ຖືກມອບໝາຍໜ້າທີ່ໃຫ້ເປັນ ຜູ້ຂຽນສູນທອນພົດກ່າວໃນພິທີໄວ້ອາໄລ. ອີງຕາມຮີດຄອງປະເພນີອັນຍາວນານ ຂອງຫວຽດນາມ ໄດ້ມີການເປີດຫີບຂອງໂຮຈິມິນ ທີ່ຮັດດ້ວຍໄມ້ໄຜ່ອອກ ເພື່ອເອົາ ເຄື່ອງໃຊ້ສອຍຂອງເພິ່ນ ແຈກຢາຍແກ່ພວກເພື່ອນຮ່ວມຮົບ ເພື່ອເປັນທີ່ລະນຶກ. ນອກຈາກນັ້ນຜູ້ຕິດຕໍ່ພິເສດໄດ້ຖືກສົ່ງໄປຈີນຢ່າງຮີບດ່ວນ ເພື່ອຊອກຮູ້ກ່ຽວກັບການຕາຍຂອງ ໂຮຈິມິນ

ແລະ ຊອກຫາຫລູມຟັງສືບຂອງເພິ່ນ.

ສອງສາມອາທິດທີ່ປາສະຈາກຂ່າວຄາວ ທີ່ເຕັມໄປດ້ວຍການລໍຄອຍໄດ້ຜ່ານໄປ, ແລ້ວວັນໜຶ່ງໜັງສືພິມທີ່ອອກເປັນປົກກະຕິ ຖືກສົ່ງມາແຕ່ຈີນ ເຖິງປາກບໍ່ ແລະຄືຈັ່ງວ່າ ເໝືອນທຸກໆຄັ້ງທີ່ຜ່ານມາ ຢູ່ຂອບໜັງສືພິມໄດ້ມີຂໍ້ຄວາມທີ່ຂຽນດ້ວຍນ້ຳເຂົ້າ ຊຶ່ງເປັນຕົວໜັງສືທີ່ເຄີຍເຫັນທີ່ສຸດ.ຢູ່ຂອບຂາວຂອງໜັງສືພິມນີ້ ມີຂໍ້ຄວາມດັ່ງຕໍ່ໄປນີ້ວ່າ:"ອວຍພອນພວກອ້າຍນ້ອງຢູ່ທາງບ້ານຈົ່ງມີສຸຂະພາບເຂັ້ມແຂງ ແລະ ເຮັດວຽກງານຢ່າງຫ້າວຫັນ. ຢູ່ທາງພູ້ນຕະຫລອດປອດໄພ".

ດ້ວຍຄວາມດີໃຈຈົນບໍ່ມີປາຍປາກກາອັນໃດມາວາດພາບໄດ້, ທຸກຄົນພາກັນແຫ່ໄປຫາກາບ, ຍື່ນໜັງສືພິມໃຫ້ເຂົາແລ້ວຖາມວ່າ:

"ຄິດຄືນຄຳເວົ້າແຕ່ລະຄຳຂອງຂ້າລາຊະການຈີນເບິ່ງດູ, ເຂົາໄດ້ເວົ້ານຳເຈົ້າວ່າແນວໃດ ?"

ກາບ ພະຍາຍາມທົບທວນຄືນ ແລະ ທຸກເລື່ອງມັນໄດ້ແຈ້ງຂາວຄືຈັ່ງຊີ້ແລ້ວ.ປະກົດວ່າ, ເຂົາຟັງບໍ່ຄັກ: ຂ້າລາຊະການພັກກົກມິນຕັງ ເວົ້າວ່າ "ຊີເລີ່, ຊີເລີ່", ຊຶ່ງມີຄວາມໝາຍວ່າ "ໄດ້ເປັນອິດສະຫລະແລ້ວ" ແຕ່ກາບ ພັດຟັງຜິດເປັນ "ສີເລີ່, ສີເລີ່", ຊຶ່ງມີຄວາມໝາຍວ່າ "ຕາຍແລ້ວ". ເບື້ອງຕົ້ນ ໃພກໍ່ຢາກຮ້າຍໃຫ້ກາບ, ແຕ່ຕໍ່ມາພວກເຂົາກໍ່ພາກັນຫົວຈົນນ້ຳຕາໄຫລ. ນິໄສໃຈຄໍຂອງຄົນຫວຽດນາມ ເປັນແນວນີ້ ເຂົາອາດຈະລືມໄວ້ໃນເລື່ອງທີ່ບໍ່ເປັນມຸງຄຸນ ຖ້າວ່າເລື່ອງດັ່ງກ່າວຜ່ານໄປແລ້ວ.

ເປັນເວລາດົນນານກໍ່ຍັງບໍ່ຮູ້ຢ່າງຈະແຈ້ງວ່າ ແມ່ນອັນໃດທີ່ຊຸກຍູ້ໃຫ້ພວກຈຽງໄຄເຊັກ ຕ້ອງຄືນອິດສະຫລະພາບໃຫ້ແກ່ນັກປະຕິວັດຫວຽດນາມ. ຕໍ່ຈາກນັ້ນມາ ຍ້ອນການຄົ້ນຄ້ວາຂອງນັກປະຫວັດສາດຫວຽດນາມ ຈຶ່ງໄປຮອດບ່ອນສະຫລຸບວ່າ ການຄືນອິດສະ-ຫລະພາບໃຫ້ແກ່ ໂຮ່ຈີມິນ ແມ່ນສ່ວນໜຶ່ງຂອງກົນອຸບາຍດ້ານການເມືອງ ອັນຍາວນານຂອງພວກ ຈຽງໄຄເຊັກ ທີ່ພົວພັນເຖິງຫວຽດນາມ. ແຕ່ຕົ້ນຊຸມປີສີ່ສິບ, ເມື່ອຍີ່ປຸ່ນບຽດຍຶດອິນດູຈີນແລ້ວ, ວົງການໃກ້ຊິດກັບຈຽງໄຄເຊັກ ໄດ້ວາງແຜນສົ່ງ "ກອງທັບຈີນ ບຸກເຂົ້າຫວຽດນາມ" ໃນເວລາທີ່ສະພາບການອຳນວຍໃຫ້ ແລະ ພາຍໃຕ້ຮູບການ ການຊ່ວຍເຫລືອປະຊາຊົນຫວຽດນາມ ໃນການຕໍ່ສູ້ຕ້ານພວກຮຸກຮານຍີ່ປຸ່ນ.

ຕໍ່ມາບໍ່ດົນພໍເທົ່າໃດ, ຢູ່ຈູງແຫ້ງ ແນວຄິດບຸກເຂົ້າຫວຽດນາມກໍໄດ້ປະກົດ ອອກເປັນຮູບເປັນຮ່າງ ແລະ ຖືກບັນຈຸຢູ່ໃນເອກະສານຂອງລັດຖະບານ ພາຍໃຕ້ຄຳຂວັນວ່າ "ກອງທັບຈີນບຸກເຂົ້າຫວຽດນາມ". ການປະຕິບັດຄຳຂວັນດັ່ງກ່າວ ໄດ້ເລີ້ມຕົ້ນພ້ອມກັບການຊຸບາຍກໍ່ສ້າງ "ແນວທີ້ຫ້າ" ທີ່ຈົງຮັກພັກດີຕໍ່ຈີນ ຢູ່ໃນໝູ່ຊາວຫວຽດນາມອົບພະຍົບຢູ່ຈີນ. ຢູ່ຈູງແຫ້ງ ພວກເຂົາມອບຄວາມຫວັງຫລາຍທີ່ສຸດໃຫ້ພວກຄົນ ຊຶ່ງເມື່ອກ່ອນນີ້ ສະໜັບສະໜູນພັກຄະນະຊາດຫວຽດນາມ ທີ່ຖືກພວກລ່າເມືອງຂຶ້ນຝະລັ່ງທັບມ້າງແລ້ວນັ້ນ. ຄົນຈຳພວກນີ້ໄດ້ອາໄສຢູ່ຈີນດົນນານ ແລະ ຕັ້ງໜ້າຮ່ວມມືກັບພັກກົກມິນຕັງ. ອຳນາດປົກຄອງກວາງໄຕ ໄດ້ຮັບຄຳສັ່ງຂອງຈູງແຫ້ງ ວ່າໃຫ້ກໍ່ສ້າງອົງການຈັດຕັ້ງປະຕິວັດໜຶ່ງທີ່ປະກອບດ້ວຍຊາວຫວຽດນາມອົບພະຍົບຢ່າງກວ້າງຂວາງ, ເມື່ອມີຄວາມຈຳເປັນ ອົງການຈັດຕັ້ງດັ່ງກ່າວຈະເປັນເຄື່ອງບັງໜ້າ ໃຫ້ແກ່ການປະຕິບັດແຜນການ "ກອງທັບຈີນບຸກເຂົ້າຫວຽດນາມ".

ເດືອນຕຸລາປີ ໑໙໔໒ ອົງການຈັດຕັ້ງໜື່ງລັກສະນະແນວນີ້ ຖືກສ້າງຕັ້ງຂຶ້ນບົນດິນແດນແຂວງກວາງໄຕ, ມັນຕັ້ງຊື່ໄວ້ເພື່ອອວດອ້າງວ່າ "ສັນນິບາດປະຕິວັດຂອງ ຫວຽດນາມ". ຜູ້ທີ່ມີການພົວພັນອັນສະໜິດແໜ້ນ ແລະ ດົນນານກັບພັກກົກມິນຕັງ ກໍໄດ້ເຂົ້າຢູ່ໃນຄະນະບໍລິຫານງານສູນກາງຂອງອົງການຈັດຕັ້ງດັ່ງກ່າວ.

ນັບຕັ້ງແຕ່ມື້ທຳອິດເປັນຕົ້ນມາ, ການເຄື່ອນໄຫວຂອງສັນນິບາດປະຕິວັດ ບໍ່ຂະຫຍາຍຕົວ ຍ້ອນການແກ່ງແຍ່ງກັນຢ່າງດຸເດືອດ ເພື່ອຍາດເອົາສິດນຳພາລະຫວ່າງພວກຫົວໜ້າ ແລະ ພັກພວກຂອງເຂົາ. ຍິ່ງໄປກວ່ານັ້ນ ພະແນກຫວຽດມິນຢູ່ຢູນນານ ຍັງໄດ້ສົ່ງໂທລະເລກໄປເຖິງ ຈຽງໄຄເຊັກ ແລະ ເຈືອງຟາດເຄວ ຜູ້ບັນຊາການເຂດທະຫານທີ ໔ ຂອງກວາງໄຕ ວ່າພວກເຂົາບໍ່ຮັບຮູ້ສັນນິບາດປະຕິວັດທີ່ຫາກໍ່ສ້າງຕັ້ງຂຶ້ນຍ້ອນວ່າອົງການຈັດຕັ້ງດັ່ງກ່າວບໍ່ມີຜູ້ຕາງໜ້າຢູ່ພາຍໃນຫວຽດນາມ, ສ່ວນຄະນະບໍລິຫານ - ງານຂອງມັນຊໍ້າພັດແມ່ນຊຸມພົນຈີນເປັນຫົວໜ້າ. ບໍ່ມີໃຜຄິດມາກ່ອນວ່າເຈືອງຟາດເຄວຈະເອົາໃຈໃສ່ຕໍ່ຄວາມລັດລ້ານດັ່ງກ່າວ. ເຂົາເອົາໃຈໃສ່ຢ່າງສຸດຂີດເພື່ອຮັດແນວໃດໃຫ້ດຶງດູດເອົາຫວຽດມິນ ມາຢູ່ນຳຝ່າຍຕົນ ເພາະວ່າເຂົາຮູ້ຢ່າງຈະແຈ້ງ ແລ້ວວ່າຫວຽດມິນ ພວມໄດ້ຮັບການສະໜັບສະໜູນອັນກວ້າງຂວາງຈາກມວນຊົນຫວຽດນາມ . ໃນເວລາກະກຽມພື້ນຖານໃຫ້ແກ່ກອງທັບຈີນໄດ້ບຸກເຂົ້າຫວຽດນາມນັ້ນ,ເຈືອງຟາດເຄວ

ໄດ້ສົ່ງຜູ້ຕາງໜ້າທີ່ເຊື່ອຖືໄດ້ຂອງຕົນ ໄປຍັງເຂດກອງຫລອນຫວຽດບັກ. ເມື່ອກັບຄືນປະເທດ ຄົນຜູ້ນີ້ລາຍງານກັບເຂົາວ່າ:

"ປະຊາຊົນຫລາຍກວ່າ ໗໐ ສ່ວນຮ້ອຍໃນບາງແຂວງ ທີ່ຂ້ອຍໄດ້ໄປຢ້ຽມຢາມ ລ້ວນແຕ່ສະໜັບສະໜູນ ຫວຽດມິນ. ຖ້າພວກເຮົາຢາກຍາດເອົາສິ່ງໃດສິ່ງໜຶ່ງ ຢູ່ຫວຽດນາມ ແນ່ນອນວ່າຕ້ອງຕິດຕໍ່ກັບຫວຽດມິນ".

ສະຖານະການເລີ່ງພວກຈຽງໄຄເຊັກ. ຜູ້ໃດກໍ່ລ້ວນແຕ່ເຫັນແຈ້ງວ່າ ສົງຄາມໂລກໃກ້ຈະຈົບລົງແລ້ວ. ພາຍຫລັງໄຊຊະນະຢູ່ໃນບັ້ນຮົບສະຕາລິນກະຣາດ, ກອງທັບແດງໄດ້ຂັບໄລ່ກອງທັບຮິດແລ ໄປກ້ຳຕາເວັນຕົກ. ອາເມລິກາ ໄດ້ຕີກອງເຮືອຮົບຍີ່ປຸ່ນຫລົ້ມ ຢູ່ມະຫາສະໝຸດປາຊີຟິກຕາເວັນອອກສຽງໃຕ້. ຄວາມອາດສາມາດທີ່ກອງທັບອາເມລິກາ–ອັງກິດ ຈະຍົກກຳລັງພົນຂຶ້ນບົກ ຢູ່ເທິງແຫລມອິນດູຈີນກໍໄດ້ປະກົດຂຶ້ນ. ທີ່ຈັ້ງຂອງຫວຽດມິນ ເຊິ່ງນັບວັນນັບໄດ້ຖືກປັບປຸງຢ່າງແໜ້ນໜາຢູ່ຫວຽດນາມ ເປັນສິ່ງ ທີ່ສ້າງຄວາມກະວົນກະວາຍໃຫ້ແກ່ຈຽງແຂ້ງ. ຈົນມາເຖິງດຽວນີ້ ພວກຈຽງໄຄເຊັກ ກໍຍັງບໍ່ທັນຕົກລົງກັນກັບຫວຽດມິນໄດ້. ສະຫລຸບແລ້ວ ສະພາບການເປັນໄປໃນແບບທີ່ວ່າແຜນການທີ່ຖືກວາງອອກ ກ່ຽວກັບການສົ່ງກອງທັບຈີນເຂົ້າໄປໃນຫວຽດນາມນັ້ນ ອາດເປັນພຽງແຕ່ແຜນການຢູ່ເທິງແຜ່ນເຈ້ຍເທົ່ານັ້ນ.

ສິ່ງທັງໝົດນີ້ ບັງຄັບຈຽງໄຄເຊັກ ໃຫ້ປ່ຽນແປງຍຸດທະວິທີ. ເຈົ້າອງຟາດຄວໄດ້ຖືກມອບໝາຍ ໃຫ້ຊອກຮູ້ສະພາບການຂອງສັນນິບາດປະຕິວັດຢ່າງຮີບດ່ວນ ແລະໃຫ້ແກ້ໄຂບັນຫາທີ່ເກີດຂຶ້ນ. ເດືອນສິງຫາ ປີ ໑໙໔໓ ຄະນະກຳມະການກະກຽມກອງປະຊຸມບັນດາກຳລັງຮັກຊາດຫວຽດນາມ ຊຶ່ງຜູ້ແທນຫວຽດມິນເຂົ້າຮ່ວມນຳໄດ້ຖືກສ້າງຕັ້ງຂຶ້ນຢູ່ຫລຽວເຈົາ. ໄລຍະເລີ່ມຕົ້ນແຫ່ງການກະກຽມກອງປະຊຸມ ມັນພັດກົງກັນກັບ ເວລາຍ້າຍໂຮ່ຈີມິນ ຈາກຄຸກເກວເລິນ ໄປຄຸກ ຫລຽວເຈົາ. ເມື່ອເຈົ້າອງຟາດຄວ ໄດ້ຮັບລາຍງານວ່າ ຢູ່ຄຸກຫລຽວເຈົາ ພວມມີບຸກຄົນສຳຄັນຜູ້ໜຶ່ງ ຊຶ່ງຄາດຄະເນວ່າແມ່ນ ຜູ້ແທນທີ່ມີອຳນາດຂອງຫວຽດມິນ, ເຂົາເອງກໍຕັດສິນໃຈທັນທີໂລດ ໂດຍສວຍໂອກາດດັ່ງກ່າວອອກຄຳສັ່ງຄືນອິດສະຫລະພາບໃຫ້ແກ່ໂຮ່ຈີມິນ. ເຫດການດັ່ງກ່າວເກີດຂຶ້ນ ໃນເດືອນກັນຍາ ປີ ໑໙໔໓. ດັ່ງນັ້ນ ໂຮ່ຈີມິນ ຈຶ່ງຖືກກັກຂັງໄວ້ໃນຄຸກທັງໝົດ໑໓ເດືອນ.

ຄົນຈີນມັກເວົ້າວ່າ: "ນົກໂທດທີ່ຫລຸດພົ້ນຈາກທີ່ກັກຂັງ, ມີຄວາມຮູ້ສຶກຄືນົກຢູ່ໃນປ່າ". ແຕ່ເມື່ອໄດ້ຮັບອິດສະຫລະພາບແລ້ວ, ໂຮ່ຈີມິນກໍໄດ້ຮັບຄວາມທໍລະມານເປັນເວ

ລາດົນນານ ຍ້ອນຜົນຮ້າຍຈາກສະພາບເປັນນັກໂທດ: ຕາມົວ, ຂາເປັນເປ້ຍ. ເພິ່ນຂອງຄິດດ້ວຍຄວາມຂົມຂື່ນວ່າ "ເປັນປະດົງເຂົ້າຂໍ້ ຊ້ຳພັດຍັງເປັນຕາຟາງ ! ມີໃຜເດນໍ ຕ້ອງການນັກຮົບຄືຈັ່ງຊີ້ ?" ແຕ່ມານະຈິດຂອງເພິ່ນຊ້ຳພັດສູງກວ່າການພັນພອນ ອີກເທື່ອໜຶ່ງຂອງຊີວິດ. ແຕ່ລະວັນເພິ່ນແອບປີນພູໄຕ່ຟອງລິງ ເພື່ອຝຶກແອບກ້າມຂາ, ສ່ວນຕອນກາງຄືນ ເພິ່ນຝຶກແອບແສງຕາ ໃນຄວາມມືດ. ການຝຶກແອບເຮັດໃຫ້ເພິ່ນອິດເມື່ອຍສຸດຂະໜາດ ແຕ່ຊ້ຳພັດນຳເອົາຜົນປະໂຫຍດມາໃຫ້ເພິ່ນ: ສຸຂະພາບເພິ່ນຄ່ອຍໆກັບຄືນສູ່ປົກກະຕິ.

ເບື້ອງຕົ້ນ ເພິ່ນບໍ່ຮັບເອົາຂໍ້ສະເໜີທີ່ຂໍໃຫ້ເພິ່ນເຂົ້າຮ່ວມໃນຄະນະ ກຳມະການກະກຽມກອງປະຊຸມຢ່າງເດັດຂາດ, ເພິ່ນເວົ້າວ່າ:

"ຂ້າພະເຈົ້າຄອງຄອຍອິດສະຫລະພາບມາດົນນານເທົ່າໃດແລ້ວ, ເວລານີ້ ຂ້າພະເຈົ້າບໍ່ອາດຈະປະຖິ້ມເວລາເປົ່າໆແມ່ນແຕ່ຍາມດຽວໄດ້. ຢູ່ພາຍໃນປະເທດ ຫວຽດນາມ ມີວຽກງານຫລວງຫລາຍອັນຮີບດ່ວນ ແລະ ສຳຄັນກຳລັງລໍຄອຍຢູ່. ສ່ວນຢູ່ທາງນີ້ຈະມີຜູ້ແທນອື່ນໆຂອງພວກເຮົາ ເຮັດວຽກແທນຂ້າພະເຈົ້າ".

ແຕ່ພ້ອມກັນນັ້ນ, ມື້ຕໍ່ມາ ເພິ່ນກໍ່ໄດ້ຮັບຈົດໝາຍຂອງເຈືອງຟາດເຄວ, ໃນຈົດໝາຍນັ້ນ ເຂົາຂໍຮ້ອງໃຫ້ເພິ່ນເຂົ້າຮ່ວມກະກຽມກອງປະຊຸມທີ່ໄດ້ກຳນົດໄວ້. ອີກປະການໜຶ່ງ ຄຳຮ້ອງຂໍດັ່ງກ່າວຍັງໄດ້ຖືກຍົກຂຶ້ນດ້ວຍສຳນຽງອັນເດັດຂາດວ່າ: ເຈືອງຟາດເຄວຖືຄວາມຕົກລົງຂອງເພິ່ນເປັນການຕອບບຸນແທນຄຸນ ໃນການຄືນອິດສະຫລະພາບ ໃຫ້ແກ່ເພິ່ນ. ຈັ່ງຊັ້ນ ກົນອຸບາຍຂອງພວກຈຽງໄຄເຊັກ ກໍ່ປະກົດອອກຢ່າງຈະແຈ້ງວ່າ: ພວກເຂົາຕັ້ງໃຈໝູນໃຊ້ອິດທິພົນຂອງໂຮ່ຈີມິນ ທີ່ມີຕໍ່ຂົບວນການຮັກຊາດຫວຽດນາມ ເພື່ອເປົ້າໝາຍການເມືອງ, ເພື່ອເປັນປະໂຫຍດສຳລັບແຜນການອັນໂດ່ງດັງຂອງພວກເຂົາຄືແຜນການສົ່ງ "ກອງທັບຈີນບຸກເຂົ້າຫວຽດນາມ".

ສະນັ້ນ, ຈຶ່ງເກີດບັນຫາວ່າຢູ່ທີ່ກວາງໄຕ ແລະ ຈູງແຂ້ງ ພວກເຂົາຈະຮູ້ຈັກ ບໍ່ວ່າ ໂຮ່ຈີມິນ ແມ່ນຫງວຽນອາຍກວັກ.

ເລຕູງເຊິນ ນັກຮົບປະຕິວັດຜູ້ອາວຸໂສ ຜູ້ທີ່ເຄີຍຢູ່ຮ່ວມກັບໂຮ່ຈີມິນຫລາຍປີ ຢູ່ພາກໃຕ້ຈີນ ແລະ ເຂົ້າຮ່ວມພ້ອມກັນກັບໂຮ່ຈີມິນຢູ່ໃນຄະນະກຳມະການກະກຽມ ທີ່ກ່າວໄວ້ຂ້າງເທິງ ໄດ້ຢັ້ງຢືນວ່າ ພວກຈຽງໄຄເຊັກ ຮູ້ແຈ້ງວ່າພວກເຂົາກຳລັງເຮັດວຽກກັບໃຜ. ໃນຈຳນວນສະມາຊິກຄະນະກຳມະການກະກຽມ ມີຄົນໜຶ່ງຊື່ວ່າ ເຈີນບາວ, ເຂົາ

ໄດ້ອາໄສຢູ່ ກວາງເຈົາ ໃນຊຸມປີ ໑໙໒໔-໑໙໒໗ ແລະ ເປັນຜູ້ເຂົ້າຮ່ວມ ເຄື່ອນໄຫວໃນສະມາຄົມຊາວໜຸ່ມປະຕິວັດຫວຽດນາມ ແລະ ຮູ້ຈັກ "ສະຫາຍເວືອງ" ເປັນຢ່າງດີທີ່ສຸດ. ໃນສະໄໝນັ້ນ ເຈິນບາວ ຮັບໃຊ້ພວກ ຈຽງໄຄເຊັກ ຢ່າງສຸດຄວາມສາມາດ, ຈະເປັນເລື່ອງແປກປະຫລາດ ຖ້າວ່າເຈິນບາວ ບໍ່ແຈ້ງໃຫ້ເຈົ້ານາຍຂອງເຂົາ ຮູ້ວ່າຄວາມຈິງແລ້ວ ໂຮ່ຈີມິນແມ່ນໃຜ, ຍິ່ງໄປກວ່ານັ້ນຊື່ໃໝ່ນີ້ກໍບໍ່ມີຄວາມໝາຍຫຍັງ ຕໍ່ຄົນຫວຽດນາມອົບພະຍົບ ເຊັ່ນດຽວກັນກັບຕໍ່ຄົນຈີນ.

ເລຕູງເຊີນ ຂຽນໄວ້ວ່າ ສາມາດຢັ້ງຢືນໄດ້ເກືອບຮ້ອຍເປີເຊັນວ່າ ບໍ່ພຽງ ແຕ່ຈຽງໄຄເຊັກເທົ່ານັ້ນ ແຕ່ຫາກຍັງລວມທັງບັນດາຫົວໜ້າຂອງສັນນິບາດປະຕິວັດ ກໍຍັງຮູ້ຈັກວ່າ ໂຮ່ຈີມິນ ຄືຫງວຽນອາຍກວັກນັ້ນເອງ. ຍ້ອນວ່າພວກຈຽງໄຄເຊັກຮູ້ວ່າ ພົວພັນກັບໃຜແທ້, ສະນັ້ນ ພາຍຫລັງການຄືນອິດສະຫລະພາບໃຫ້ໂຮ່ຈີມິນແລ້ວ ພວກເຂົາ ຈຶ່ງໃກ້ຊິດສະໜິດສະໜົມ ແລະ ເຄົາລົບນັບຖືເພິ່ນຫລາຍທີ່ສຸດ. ອີກປະການໜຶ່ງ ໂຮ່ຈີມິນ ຫລືຫງວຽນອາຍກວັກ ແມ່ນນັກເຄື່ອນໄຫວທີ່ມີຊື່ສຽງຂອງຂະບວນການກອມມູນິດສາກົນ ເປັນນັກປະຕິວັດຫວຽດນາມທີ່ທຸກຄົນຮັກແພງ. ອຳນາດປົກຄອງ ຈູງແຊັງ ຄົງຈະເປັນຝ່າຍສາຍຕາສັ້ນທີ່ສຸດ ຖ້າວ່າພວກເຂົາບໍ່ຊອກວິທີໝູນໃຊ້ອິດທິພົນອັນສູງສົ່ງຂອງໂຮ່ຈີມິນ ເພື່ອເປົ້າໝາຍຂອງພວກເຂົາ. ຍິ່ງໄປກວ່ານັ້ນອັນເວລາ ກໍໄດ້ປ່ຽນແປງ, ພັກກົກມິນຕັງ ແລະ ພັກກອມມູນິດຈີນຮ່ວມມືກັນໃນແນວໂຮມແຫ່ງຊາດ ເພື່ອຕ້ານ ພວກຮຸກຮານຍີ່ປຸ່ນ. ອີກປະການໜຶ່ງຢູ່ບັນດາປະເທດທີ່ຖືກພວກຮິດແລຮຸກຮານນັ້ນ ຊາວກອມມູນິດໄດ້ອອກໜ້າໃນການຕໍ່ສູ້ຕ້ານການຮຸກຮານ. ໃນເງື່ອນໄຂດັ່ງກ່າວ ເປັນຫຍັງ ຈຽງໄຄເຊັກ ຈຶ່ງບໍ່ປັບປຸງການຮ່ວມມືກັບ ຫງວຽນອາຍກວັກ "ຜູ້ເປັນຄົນໂບນເຊວິກ" ໃນການຕໍ່ສູ້ຕ້ານຍີ່ປຸ່ນ ຢູ່ອິນດູຈີນ. ເລຕູງເຊີນ ສະຫລຸບວ່າ ເວົ້າສັ້ນໆ ການທີ່ໂຮ່ຈີມິນຖືກປ່ອຍຕົວກໍຕໍ່ເມື່ອພວກຈຽງໄຄເຊັກຮູ້ແຈ້ງແລ້ວວ່າ ຄວາມຈິງແລ້ວ ເພິ່ນເປັນໜຶ່ງໃນຈຳນວນຜູ້ນຳຂະບວນການປົດປ່ອຍຫວຽດນາມນັ້ນເອງ.

ການເຂົ້າຮ່ວມຂອງໂຮ່ຈີມິນ ໃນວຽກງານຂອງຄະນະກຳມະການກະກຽມ ກອງປະຊຸມ ໄດ້ປ່ຽນແປງບັນຍາກາດໃນຄະນະກຳມະການດັ່ງກ່າວ ຢ່າງເຖິງກົກເຖິງຮາກ. ຖ້າວ່າກ່ອນໜ້ານີ້ ໃນຈຳນວນສະມາຊິກຂອງສັນນິບາດປະຕິວັດ ມີພວກທີ່ຄັດຄ້ານ ຢ່າງ

ຮຸນແຮງ ຕໍ່ການຮ່ວມມືກັບພັກກອມມູນິດອິນດູຈີນ ແລະ ຫວຽດມິນ, ເວລານີ້ ພວກເຂົາກໍ້ຕ້ອງບໍ່ມີປາກສຽງ. ສະມາຊິກຂອງຄະນະກຳມະການກະກຽມເຫັນດີເຫັນພ້ອມ ຢ່າງບໍ່ລໍ້ຊ້າ ກ່ຽວກັບພາກສ່ວນປະກອບຂອງພັກຝ່າຍ ແລະ ອົງການຈັດຕັ້ງ ຊຶ່ງອາດຖືກ ເຊີນເຂົ້າຮ່ວມກອງປະຊຸມທົ່ວປະເທດ. ອົງການຈັດຕັ້ງຄື ພັກກອມມູນິດອິນດູຈີນ, ຫວຽດມິນ, ສັນນິບາດປະຕິວັດຂອງຫວຽດນາມ (ເອີ້ນຫຍໍ້ວ່າຫວຽດແກັກ), ພັກຄະນະຊາດຫວຽດນາມ (ເອີ້ນຫຍໍ້ວ່າຫວຽດກວັກ) ແລະ ສຸດທ້າຍຄືພັກ ດາຍຫວຽດ ຂອງນາຍທຶນ ທີ່ນິຍົມຍີ່ປຸ່ນ. ສະມາຊິກຈຳນວນຫນຶ່ງຂອງຄະນະກຳມະການກະກຽມຄັດຄ້ານການເຊີນພັກດາຍຫວຽດ, ເຫດຜົນກໍຍ້ອນວ່າພັກດັ່ງກ່າວມີທ່າອຽງ ນິຍົມຍີ່ປຸ່ນ, ແຕ່ໂຮ່ຈິມິນສະເຫນີໃຫ້ເຊີນພັກນີ້ ກໍເພື່ອຊອກວິທີຊັກຊວນຕົວແທນປັນຍາຊົນທີ່ມີນ້ຳໃຈຮັກຊາດ ທີ່ຮ່ວມກຸ່ມກັບດາຍຫວຽດ ມາເຂົ້າຮ່ວມຝ່າຍປະຕິວັດ. ນອກນັ້ນ ໂຮ່ຈິມິນ ຍັງສະເຫນີໃຫ້ເຊື້ອເຊີນຜູ້ຕາງຫນ້າຂອງອົງການຈັດຕັ້ງ ຊຶ່ງຄືດັ່ງວ່າຢືນຢູ່ນອກການເຄື່ອນໄຫວການເມືອງເຊັ່ນ : ສະມາຄົມຊາວພຸດ, ສະມາຄົມເຜີຍແຜ່ຄວາມຮູ້, ສະມາຄົມເຜີຍແຜ່ຕົວອັກສອນ ຫວຽດນາມເດີມ ເພິ່ນເວົ້າວ່າ ອົງການຈັດຕັ້ງດັ່ງກ່າວເຫລົ່ານີ້ ຮວບຮວມເອົາຄົນ ຈຳນວນຫລາຍ ທີ່ມີນ້ຳໃຈຮັກຊາດ ຊຶ່ງການປະຕິວັດຈະຕ້ອງຊັກຈູງມາຫາຝ່າຍຕົນ.

ການຖົກຖຽງກັນຢ່າງເຜັດຮ້ອນໄດ້ດຳເນີນໄປ ຢູ່ອ້ອມຂ້າງຂໍ້ສະເຫນີຂອງໂຮ່ຈິມິນ ແລະ ເລຕູງເຊີນ ຍຶກອຶນ. ພວກເພິ່ນສະເຫນີວ່າ ຄຽງຄູ່ກັບຜູ້ຕາງຫນ້າຫວຽດມິນ ກໍໃຫ້ມີຜູ້ແທນຂອງສະມາຄົມກູ້ຊາດເຊັ່ນ: ກຳມະກອນ, ຊາວນາ, ແມ່ຍິງ, ຊາວຫນຸ່ມເຂົ້າຮ່ວມຢ່າງເປັນເຈົ້າຕົນເອງ ໃນກອງປະຊຸມທົ່ວປະເທດຄັ້ງນີ້ເຊັ່ນກັນ. ເຈືອງໂບຍກີງ ແລະ ພັກພວກຂອງເຂົາ ກະວົນກະວາຍວ່າ ຖ້າເປັນດັ່ງນັ້ນ ຜູ້ແທນຂອງຫວຽດມິນຈະໄດ້ຮັບສຽງສ່ວນຫລາຍ ຢູ່ກອງປະຊຸມຄັ້ງຕໍ່ໄປ. ກຳນົດເວລາດຳເນີນກອງປະຊຸມຄັ້ງຕໍ່ໄປເປັນບັນຫາທີ່ຈະຕ້ອງຖົກຖຽງກັນຢ່າງເຜັດຮ້ອນ. ສະມາຊິກຂອງຫວຽດແກັກ ສະເຫນີໃຫ້ຮຽກໂຮມກອງປະຊຸມພາຍໃນສາມເດືອນ, ສ່ວນໂຮ່ຈິມິນ ແລະ ເລຕູງເຊີນພັດສະເຫນີ ພາຍໃນຫນຶ່ງປີ. ພວກເພິ່ນຄາດຄະເນຢ່າງມີເຫດຜົນວ່າ ພາຍໃນເວລາສາມເດືອນ ຫວຽດມິນຈະລັກສົ່ງຕົວແທນຂອງຕົນໄປຈີນບໍ່ທັນ, ເມື່ອສະພາບເປັນດັ່ງນັ້ນຈະເຮັດໃຫ້ເຈືອງໂບຍກີງ ແລະ ພັກພວກມີອະພິສິດໃນກອງປະຊຸມທົ່ວປະເທດ ແລະບັງຄັບໃຫ້ກອງປະຊຸມຮັບຮອງເອົາມະຕິຕ່າງໆຕາມລຳພັງໃຈ. ການຖົກຖຽງກັນບໍ່ໃຫ້ ຜົນຫຍັງ ວຽກງານຂອງຄະນະກຳມະການກະກຽມກໍ່ຫາທາງອອກບໍ່ໄດ້.

ຫລັງຈາກຄົ້ນຄິດເປັນເວລາດົນນານ ໂດຍຊັ່ງຊາພົນໄດ້ພົນເສຍ ໂຮ່ຈີມິນ ແລະ
ເລຕູງເຊີນ ຈຶ່ງຕົກລົງສະເໜີໃຫ້ເຈືອງຟາດເຄວ ເປັນກຳມະການຕັດສິນການຖົກຖຽງ
ກັນ. ເພິ່ນທັງສອງຄົນສົ່ງຈົດໝາຍສະບັບໜຶ່ງ ສະແດງແຜນການຂອງຕົນໃຫ້ ເຈືອງ
ຟາດເຄວ: ຄະນະກະກຽມຈະປ່ຽນແປງກອງປະຊຸມຂອງຜູ້ຕາງໜ້າທີ່ຢູ່ຕ່າງປະເທດ; ຜູ້
ທີ່ເຂົ້າຮ່ວມກອງປະຊຸມຈະຄົ້ນຄວ້າເງື່ອນໄຂ ເພື່ອຮຽກປະຊຸມທົ່ວປະເທດ, ອີກປະການ
ໜຶ່ງ ກອງປະຊຸມດັ່ງກ່າວຕ້ອງເປີດປະຊຸມ ໃນຂອບເຂດໜຶ່ງປີຢູ່ເຂດກອງຫລອນຫວຽດ
ບັກ ແຕ່ບໍ່ແມ່ນເປີດຂຶ້ນຢູ່ຈີນ; ໂຮ່ຈີມິນມີໜ້າທີ່ເປັນຜູ້ຊອກສະຖານທີ່ອັນສະດວກເພື່ອດຳ
ເນີນກອງປະຊຸມ; ໃຜຢາກເຂົ້າຮ່ວມກອງປະຊຸມຢູ່ບົນດິນແດນຫວຽດນາມ ຕ້ອງແຈ້ງ ຊື່
ຂອງຕົນໄປໃຫ້ຄະນະກະກຽມຮູ້ກ່ອນລ່ວງໜ້າ.

ເຈືອງຟາດເຄວ ມີທ່າທີເຄົາລົບນັບຖືໂຮ່ຈີມິນຫລາຍທີ່ສຸດ,ເຂົາເອີ້ນເພິ່ນວ່າ"ຜູ້
ແທນໂຮ່". ເຈືອງຟາດເຄວ ມັກນິໄສຂອງໂຮ່ຈີມິນ ນອກຈາກນັ້ນເຂົາກໍຍັງບໍ່ກ້າສ່ຽງທີ່
ຈະທຳລາຍການເຈລະຈາກັບຫວຽດມິນ ທີ່ໄດ້ເລີ່ມຕົ້ນຢ່າງຈົບງາມ. ສອງສາມມື້ ພາຍ
ຫລັງທີ່ໄດ້ຮັບຈົດໝາຍຂອງໂຮ່ຈີມິນແລ້ວ ເຈືອງຟາດເຄວ ໄດ້ເຊື້ອເຊີນສະມາຊິກ ຄະ
ນະກະກຽມທັງໝົດ ມາກິນເຂົ້າທ່ຽງຢູ່ເຮືອນຂອງເຂົາ. ເຈືອງຟາດເຄວ ອ່ານບົດປາ
ໄສ ທີ່ມີເນື້ອໃນສັ້ນໆວ່າ:

"ຂ້າພະເຈົ້າຄິດວ່າ ຝ່າຍພວກຂ້າພະເຈົ້າຈະຜິດພາດໜັກທີ່ສຸດ ຖ້າຍັງ ກອດ
ເອິກນັ່ງຄອຍຖ້າໄປຈົນຮອດເວລາທີ່ການປະຊຸມ ຊຶ່ງພວກເຮົາໄດ້ກະກຽມຢ່າງລະອຽດ-
ລະອໍຢູ່ນັ້ນ ໄດ້ພົບກັບຄວາມປະລາໄຊ. ບົນຈິດໃຈດັ່ງກ່າວ ຂ້າພະເຈົ້າສະເໜີ ຜູ້ແທນ
ໂຮ່ ເປັນຜູ້ຮ່າງໂຄງຮ່າງແຜນການດຳເນີນກອງປະຊຸມທີ່ຈະມາເຖິງນີ້ ແລະກອງປະຊຸມ
ຄັ້ງຕໍ່ໄປ ໃຫ້ຂ້າພະເຈົ້າ. ຂ້າພະເຈົ້າໄດ້ອ່ານໂຄງຮ່າງດັ່ງກ່າວຢ່າງລະອຽດ. ຂ້າພະ
ເຈົ້າເຫັນວ່າອັນນັ້ນ ແມ່ນແຜນການປະຕິວັດ ທີ່ເຕັມໄປດ້ວຍນ້ຳໃຈສະເໝີພາບ ແລະ
ຈິດໃຈຢາກເຕົ້າໂຮມບັນດາພັກຝ່າຍ, ບັນດາອົງການຈັດຕັ້ງປະຕິວັດຫວຽດນາມ ເຂົ້າ
ກັນ. ຂ້າພະເຈົ້າຢາກສະເໜີແຜນການດັ່ງກ່າວໃຫ້ບັນດາແຂກຜູ້ມີກຽດຊາບ".

ເມື່ອເຈືອງຟາດເຄວ ອ່ານຈົດໝາຍຈົບລົງແລ້ວ ເຈືອງໂບຍກົງ ບໍ່ຮູ້ຈະເຮັດ
ຫຍັງອີກ ນອກຈາກຂອບໃຈນຳເຈືອງຟາດເຄວ ແລະ ໂຮ່ຈີມິນ. ເມື່ອເຫັນດັ່ງນັ້ນ ສະ
ມາຊິກອື່ນໆຂອງຄະນະກຳມະການກໍພາກັນຍ້ອງຍໍແຜນການທີ່ໄດ້ຍົກຂຶ້ນ.

ມື້ໄຂກອງປະຊຸມ ຂອງບັນດາຜູ້ແທນທີ່ຢູ່ຕ່າງປະເທດ ຂອງຂະບວນການປະຕິວັດຫວຽດນາມ ກໍໄດ້ມາຮອດ. ເພື່ອຫລີກເວັ້ນຈາກການຈ້ອງມອງຂອງຄົນພາຍນອກ ແລະ ເພື່ອຄວບຄຸມກອງປະຊຸມຢ່າງສົມບູນ, ເຈືອງຟາດເຄວ ໄດ້ມອບທີ່ທຳງານຂອງກອງເສນາທິການເຂດທະຫານໃຫ້ແກ່ບັນດາຜູ້ແທນ. ກອງປະຊຸມເປີດຂຶ້ນທ່າມກາງສຽງເພງ - ເດີນ ອັນສະຫງ່າຜ່າເຜີຍ ຊຶ່ງແມ່ນກອງດູລິຍາງຂອງກອງທັບຈີນເປັນຜູ້ເສບໃຫ້. ຊາວຈີນ ພ້ອມດ້ວຍພວກເພື່ອນມິດຂອງເຂົາເຈົ້າຈາກຫວຽດແກັກ ລ້ວນແຕ່ເຮັດທຸກວິທີເພື່ອຊີ້ໃຫ້ເຫັນວ່າ ເຫດການທີ່ເກີດຂຶ້ນໃນດຽວນີ້ມີລັກສະນະຄືປາງບຸນ ແລະ ຄືກັນພິເສດ . ແນ່ນອນ,ພວກເຂົາເຫັນວ່າ ໃຕ້ການຊີ້ນຳຂອງພວກຈຽງໄຄເຊັກນັ້ນ ມີການເຕົ້າໂຮມບັນດາຜູ້ຕາງໜ້າທີ່ແຕກຕ່າງກັນທີ່ສຸດໃນບັນດາກຳລັງຮັກຊາດຫວຽດນາມ, ມາເຖິງປະຈຸບັນນີ້ ມີຫລາຍກຸ່ມຍັງບໍ່ຢາກພົວພັນຊຶ່ງກັນ ແລະ ກັນ. ຊາວຈີນ ແລະ ພິເສດແມ່ນນັກເຄື່ອນໄຫວຂອງຫວຽດແກັກ ແລະ ຫວຽດກວັກ ຊຶ່ງລ້ວນແຕ່ນຸ່ງຫົ່ມສຸພາບຮຽບຮ້ອຍທີ່ສຸດຄືຈັ່ງວ່າ ໃນວັນນີ້ພວກເຂົານຸ່ງຫົ່ມເສື້ອຜ້າອາພອນອັນງາມທີ່ສຸດເທົ່າທີ່ເຂົາມີຢູ່. ບັນດາພົນທະຫານໃສ່ເຄື່ອງແບບໃຫມ່ອຽມ ແລະ ໃສ່ເກີບໂບກ. ຜູ້ທີ່ນຸ່ງເຄື່ອງແບບ ພົນລະເຮືອນເຫື່ອກໍຍ້ອຍທົ່ວຕົນຕົວ ຍ້ອນວ່າຕ້ອງໄດ້ນຸ່ງຊຸດໃຫຍ່ຂົນສັດ, ຂ້າງໃນພັດຫົ່ມ ເສື້ອແຂນຍາວເຮັດດ້ວຍໄຫມສີຂາວ. ທ່າມກາງບັນຍາກາດອັນພູມຖານດັ່ງກ່າວ ໂຮ່ຈີມິນຊ້ຳພັດຕ່າງກັບຜູ້ອື່ນ ເພິ່ນນຸ່ງຫົ່ມໂສ້ງເສື້ອເກົ່າແລ້ວ ຄໍເສື້ອກໍດ່າງດາວ ຕາບຈຸ່ມບ່າແລະຫົວເຂົ່າ. ທ່າທີພາຍນອກຂອງເພິ່ນ ຄືຈັ່ງວ່າຢາກບອກໃຫ້ຮູ້ວ່າ: ທຸກສິ່ງທຸກຢ່າງ ທີ່ກຳລັງເກີດຂຶ້ນຢູ່ແຫ່ງນີ້ ລ້ວນແຕ່ຂັດກັບທາດແທ້ຂອງເພິ່ນ ແຕ່ເຖິງຢ່າງໃດ ໃນຖານະເປັນນັກປະຕິວັດທີ່ແທ້ຈິງ ຜູ້ທີ່ມີພາກປະຕິບັດ ເພິ່ນຈຳເປັນຕ້ອງປະຕິບັດຕາມສະພາບການ , ເພື່ອໃຫ້ເປັນຜົນດີສຳລັບຍຸດໂທບາຍນັ້ນ ເພິ່ນຈຶ່ງປະນີປະນອມກັບຈຳພວກຄົນ ຊຶ່ງເພິ່ນບໍ່ມີຄວາມສັດທາ ທັງເປັນຕົວແທນໃຫ້ແກ່ກຳລັງທີ່ເປັນປໍລະປັກກັບການປະຕິວັດ.

ແຕ່ຢູ່ເທິງເວທີ ເພິ່ນກໍຍັງວາງຕົວແບບງ່າຍດາຍ ແລະ ເອົາການເອົາງານ . ເພິ່ນເລົ່າກ່ຽວກັບການເຄື່ອນໄຫວຂອງຫວຽດມິນ, ພິເສດແມ່ນສຸມຈິດໃຈໃສ່ ບົດບາດຂອງນັກກອມມູນິດ ຢູ່ໃນການຕໍ່ສູ້ຕ້ານພວກຍີ່ປຸ່ນຜູ້ຮຸກຮານ.ເຈືອງຟາດເຄວ ຕົບມືຊົມ-ເຊີຍຢ່າງລຽນຕິດ ຈົນວ່າຜູ້ຟັງຄົນອື່ນຕ້ອງກະທຳຕາມ. ສີຫນ້າຂອງເຈືອງຟາດເຄວສະແດງໃຫ້ເຫັນວ່າ ເຂົາພາກພູມໃຈທີ່ສຸດຕໍ່ ໂຮ່ຈີມິນ ຜູ້ຊຶ່ງເຂົາຖືວ່າ "ເປັນປະດິດພົນຂອງເຂົາ" ຍ້ອນວ່າເຂົາໄດ້ຄືນອິດສະຫລະພາບຢ່າງທ່ວງທັນກັບເວລາໃຫ້ແກ່ນັກເຄື່ອນ

ໄຫວທີ່ມີຊື່ສຽງຄົນນີ້ຂອງຫວຽດມິນ, ແມ່ນຍ້ອນເຂົາເອງ ສັນນິບາດປະຕິວັດ ຈຶ່ງມີສີສັນ ການເມືອງນາໆຊະນິດ ຊຶ່ງເປັນບັນຫາໜຶ່ງເຊິ່ງຢູ່ຈູງແຂັງ ເຮັດໄດ້ກໍພຽງແຕ່ຄວາມເຝີ້ ຝັນເທົ່ານັ້ນ. ເຈືອງມີໜ້າຢູ່ກອງປະຊຸມຈົນເຖິງນາທີສຸດທ້າຍ, ຈົນຮອດເວລາ ທີ່ດໍາ ເນີນການເລືອກຕັ້ງ ແລະ ໂຮ່ຈີ່ມິນ ຖືກເພີ່ມເຕີມເຂົ້າເປັນສະມາຊິກສໍາຮອງ ຄະນະບໍ ລິຫານງານສູນກາງສັນນິບາດປະຕິວັດ. ຫລັງຈາກນັ້ນເຈືອງຈຶ່ງຊຸມອຽນຈິດໃຈ.

"ກອງປະຊຸມຜູ້ແທນທີ່ຢູ່ຕ່າງປະເທດໄດ້ສິ້ນສຸດລົງ. ຈະອະນຸຍາດໃຫ້ໂຮ່ຈີ່ມິນກັບ ຄືນປະເທດໄດ້ຫລືບໍ ?" ເຈືອງຟາດຄວ ໄດ້ໂທລະເລກຖາມຈູງແຂັງ ຄືແນວນີ້. ຈູງ ແຂັງສົ່ງໂທລະເລກຕອບໂດຍອະນຸຍາດໃຫ້ໂຮ່ຈີ່ມິນ ກັບຄືນປະເທດຊາດໄດ້. ໂທລະເລກ ດັ່ງກ່າວໄດ້ກາຍເປັນເອກະສານສະບັບທໍາອິດທີ່ຢັ້ງຢືນວ່າເພິ່ນໄດ້ຫລຸດພົ້ນຈາກການເປັນ ຊະເລີຍຂອງພັກກົກມິນຕັງ.

ເວລາກະກຽມອອກເດີນທາງ ໂຮ່ຈີ່ມິນໄດ້ເວົ້ານໍາ ເລຕູງເຊິນ ວ່າ:

"ຜົນສໍາເລັດຂອງກອງປະຊຸມແມ່ນໝາກຜົນອັນໃຫຍ່ຫລວງສໍາລັບພວກເຮົາ . ການທີ່ພວກເຮົາເຂົ້າຮ່ວມກອງປະຊຸມເປັນການກະທໍາທີ່ຖືກຕ້ອງ. ການບໍ່ເຂົ້າຮ່ວມກອງ ປະຊຸມ ເປັນຄວາມຜິດພາດ. ແນ່ນອນແລ້ວ ພວກເຮົາບໍ່ຄວນຫລໍ່ລ້ຽງຄວາມຝັນກ່ຽວກັບ ຈຽງໄຄເຊັກ ແຕ່ພວກເຮົາສາມາດ ແລະ ຕ້ອງພະຍາຍາມຜ່ານຈີນເພື່ອຊອກຫາ ວິທີ ທາງໄປຕິດຕໍ່ກັບມະຫາອໍານາດຜູ້ເປັນພັນທະມິດ ແລະ ຍາດແຍ່ງເອົາການສະໜັບສະ- ໜູນຂອງເຂົາເຈົ້າ ຕໍ່ພາລະກິດປົດປ່ອຍຂອງພວກເຮົາ".

ສຸດທ້າຍ ຜົນສໍາເລັດອັນສໍາຄັນກວ່າໝູ່ ຂອງການຕໍ່ສູ້ອັນຍາວນານ ພາຍໃນຄະ ນະກໍາມະການກະກຽມ ເພື່ອຮຽກໂຮມກອງປະຊຸມນັ້ນ ແມ່ນສິ່ງທີ່ແນ່ນອນວ່າ ໂຮ່ຈີ່ມິນບໍ່ ອາດເວົ້າໄດ້ ແຕ່ຊໍ້າພັດເປັນສິ່ງທີ່ເປີດໂອກາດໃຫ້ຜູ້ນໍາຊາວກອມມູນິດຫວຽດນາມກັບຄືນ ສູ່ປະເທດຊາດໃນທັນໃດ ກ່ອນເວລາເກີດມີເຫດການອັນເດັ່ງຮ້ອນ, ເປີດໂອກາດ ໃຫ້ ເພິ່ນເປັນຜູ້ກໍາພວງມາໄລການປະຕິວັດ ທີ່ກໍາລັງຂະຫຍາຍຕົວຢ່າງວ່ອງໄວອີກເທື່ອໜຶ່ງ ແລະ ເປັນຜູ້ຂັດທ້າຍເຮືອປະຕິວັດຢ່າງຄ່ອງແຄ້ວ ຜ່ານຜ່າຕາດຄອນທີ່ມີອັນຕະລາຍ ໄປ ຈົນຮອດໄຊຊະນະ ຊຶ່ງເປັນສິ່ງທີ່ຄອງຄອຍມາແຕ່ດົນນານແລ້ວ.

ພາຍຸລົມແດງປະຕິວັດ

໑

ໃນມື້ຂອງເດືອນກໍລະກົດ ປີ ໑໙໔໔ ໂຮ່ຈີມິນ ໄດ້ເລັດລອດຂ້າມຊາຍແດນຈີນ-ຫວຽດນາມໄປຕາມເສັ້ນທາງທີ່ຄຸ້ນເຄີຍ ແລະ ກັບຄືນມາປາກບໍ່. ຢູ່ແຫ່ງນີ້ ເພິ່ນໄດ້ພົບສະຫາຍ ແລະ ເພື່ອນຮ່ວມຮົບ. ການພົບພໍ້ຄັ້ງນີ້ຍັງເບີກບານມ່ວນຊື່ນເປັນທະວີຄູນຍ້ອນວ່າຂະບວນການປະຕິວັດໄດ້ບັນລຸຜົນອັນຈະແຈ້ງ. ຈາກລາຍງານຕ່າງໆແລະ ຈາກການເລົ່າເລື່ອງຂອງສະມາຊິກຄະນະບໍລິຫານງານສູນກາງພັກອາດພາບເຫັນຮູບພາບ ທີ່ເຕັມໄປດ້ວຍສຸຂະທັດນິຍົມ. ແນວໂຮມຫວຽດມິນ ໄດ້ຂະຫຍາຍຕົວກາຍຂອບເຂດ ອູ່ຂອງມັນເຊິ່ງໄດ້ແກ່ຖານທີ່ໝັ້ນກອງຫລອນຫວຽດບັກ ແລະ ນັບວັນຍິ່ງນັບມີລັກສະນະທົ່ວປະເທດຢ່າງປະຈັກຕາກວ່າເກົ່າ. ສະມາຄົມກູ້ຊາດ ແລະ ຖານທີ່ໝັ້ນຂອງຫວຽດມິນ ໄດ້ປະກົດຕົວຂຶ້ນໃນຫລາຍແຂວງຢູ່ປາກແມ່ນ້ຳແດງ, ພາກກາງຈູງໂບ ແລະ ກະທັ້ງຢູ່ທີ່ ນະຄອນໄຊ່ງ່ອນ. ດັ່ງທີ່ເຫດການທີ່ປະກົດຂຶ້ນໃນຄັ້ງຕໍ່ໆມາໄດ້ຊີ້ໃຫ້ເຫັນວ່າ ການກໍ່ສ້າງ

"ເຂດປອດໄພ" ໃນເບື້ອງຕົ້ນຢູ່ເຂດຊານເມືອງຮ່າໂນ້ຍ, ຕໍ່ມາຢູ່ຕາມແຂວງ ບັກຢາງ ແລະ ທາຍງວຽນ ເຊິ່ງຕັ້ງຢູ່ກ້ຳເໜືອຂອງຮ່າໂນ້ຍ. ແມ່ນບາດກ້າວອັນສະຫລາດສ່ອງໃສຂອງພັກ. ດັ່ງນັ້ນຂົວຕໍ່ໂດຍກົງລະຫວ່າງເຂດກອງຫລອນກັບນະຄອນຫລວງ ຈຶ່ງໄດ້ຖືກສ້າງຂຶ້ນ, ນັ້ນເປັນສິ່ງທີ່ຊ່ວຍໃຫ້ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນໄດ້ກວດກາການຂະຫຍາຍຕົວຂອງສະພາບການຢູ່ ຮ່າໂນ້ຍ ໃນໄລຍະກະກຽມ ກໍຄື ໃນເວລາລຸກຮືຂຶ້ນປະກອບອາວຸດທົ່ວປະເທດ ໃນຂັ້ນຕໍ່ໄປ.

ກ່ອນອື່ນໝົດ ປັດໄຈພາວະວິໄສຈຳນວນໜຶ່ງໄດ້ປະກອບສ່ວນເພີ່ມອິດທິພົນຂອງຫວຽດມິນ, ນັ້ນຄືບາດລ້ຽວຢ່າງເຖິງກົກເຖິງຮາກໃນສົງຄາມໂລກຄັ້ງທີສອງ ຊຶ່ງເກີດຈາກໄຊຊະນະອັນພິລະອາດຫານຂອງປະຊາຊົນໂຊວຽດ; ການປະລາໄຊ ຂອງພວກຂຸນເສິກຍີ່ປຸ່ນຢູ່ຈີນ ແລະ ຢູ່ສະໜາມຮົບມະຫາສະໝຸດປາຊີຟິກ; ສະພາບການເສດຖະກິດທີ່ເສື່ອມໂຊມຢ່າງຮ້າຍແຮງ ຢູ່ຫວຽດນາມ ເນື່ອງມາຈາກນະໂຍບາຍເກັບເກນຢ່າງບັງອາດ ທີ່ພວກຍີ່ປຸ່ນມີຕໍ່ປະຊາຊົນຫວຽດນາມ, ພິເສດແມ່ນການເກັບເກນເຄື່ອງ ບໍລິໂພກໃຫ້ແກ່ກອງທັບ; ສຸດທ້າຍ ການຍາດຊີງກັນ ຊຶ່ງນັບວັນນັບເພີ່ມຂຶ້ນ ລະຫວ່າງພວກຂຸນເສິກຍີ່ປຸ່ນ ແລະ ພວກວິຊີ ແມ່ນສິ່ງທີ່ເຮັດໃຫ້ອິດທິພົນຂອງອິດທິກຳລັງ ທີ່ນິຍົມຝະລັ່ງ ແລະ ກຳລັງທີ່ນິຍົມຍີ່ປຸ່ນ ທີ່ມີຢູ່ໃນວົງການການເມືອງຂອງສັງຄົມຫວຽດນາມ ນັບວັນຫລຸດໜ້ອຍຖອຍລົງ.

ນອກຈາກນັ້ນ ວຽກງານໂຄສະນາຂົນຂວາຍອັນຂະຫຍັນຂັນແຂງ ແລະ ດຸໝັ່ນທີ່ພັກກອມມູນິດອິນດູຈີນດຳເນີນໄປໃນໝູ່ມະຫາຊົນຈຳນວນຫລວງຫລາຍເພື່ອ ຈຸດປະສົງດູດດຶງເອົາພວກທີ່ເປັນພັນທະມິດມາເຂົ້າຝ່າຍຫວຽດມິນໃຫ້ໄດ້ຫລາຍເທົ່າໃດຍິ່ງດີ ເທົ່ານັ້ນຢູ່ໃນການຕໍ່ສູ້ຕ້ານແອກຄອບຄອງຂອງພວກຍີ່ປຸ່ນ ແລະ ພວກວິຊີ ກໍລ້ວນແຕ່ໄດ້ຮັບຜົນສຳເລັດເຊັ່ນດຽວກັນ. ວຽກງານດັ່ງກ່າວໄດ້ດຳເນີນໄປຕາມສອງທິດ: ດ້ານໜຶ່ງ ໄດ້ປະກາດແນວທາງທີ່ແນໃສ່ສືບຕໍ່ຂະຫຍາຍສ່ວນປະກອບທາງຊົນຊັ້ນຂອງຫວຽດມິນ,ດູດດຶງເອົານາຍທຶນນ້ອຍຢູ່ໃນຕົວເມືອງ, ບັນດາຊັ້ນຄົນທີ່ຮັ່ງມີຢູ່ເຂດຊົນນະບົດ, ນາຍທຶນແຫ່ງຊາດ ແລະ ເຈົ້າທີ່ດິນທີ່ມີຈິດໃຈຮັກຊາດ ເຂົ້າຢູ່ໃນຫວຽດມິນຢ່າງຕັ້ງໜ້າກວ່າເກົ່າ.

ພັກກອມມູນິດອິນດູຈີນ ສາມາດທຳການຕິດຕໍ່ກັບຜູ້ຕາງໜ້າທີ່ມີຊື່ສຽງ ໃນໝູ່ປັນຍາຊົນ ແລະ ນັກສຶກສາຫວຽດນາມ, ຜົນທີ່ໄດ້ຮັບມາແມ່ນ ໃນເດືອນມິຖຸນາ ປີ ໑໙໔໔ ພັກປະຊາທິປະໄຕຫວຽດນາມ ກຳເນີດເກີດຂຶ້ນ. ພັກດັ່ງກ່າວແມ່ນພັກນາຍທຶນແຫ່ງຊາດ

ທີ່ມີລັກສະນະປະຕິວັດ, ພັກດັ່ງກ່າວຖະແຫລງທັນທີໂລດວ່າ ຕົນເອົ້າຢູ່ໃນຖັນແຖວຫວຽດ ມິນ. ອັນນັ້ນ ມັນແມ່ນໄຊຊະນະອັນໃຫຍ່ຫລວງຂອງກຳລັງປະຕິວັດ. ເປັນຄັ້ງທຳອິດໃນ ປະຫວັດສາດຂອງຂະບວນການປົດປ່ອຍຊາດຂອງປະຊາຊົນຫວຽດນາມ ທີ່ພັກການເມືອງ ໜຶ່ງຂອງຊົນຊັ້ນນາຍທຶນແຫ່ງຊາດ ທຳການຕໍ່ສູ້ຢູ່ໃນຖັນແຖວແນວໂຮມເອກະພາບ ແຫ່ງ ຊາດພາຍໃຕ້ການນຳພາຂອງພັກກອມມູນິດ ແລະ ຊົນຊັ້ນກຳມະກອນ. ພັກກອມມູນິດອິນ ດູຈີນ ສະແດງໃຫ້ເຫັນອີກເທື່ອໜຶ່ງວ່າ ພັກຮູ້ຈັກໝູນໃຊ້ຢ່າງສຸດກົກສຸດປາຍ ແລະຢ່າງ ປະດິດສ້າງ ຫລັກການພື້ນຖານຂອງລັດທິມາກ-ເລນິນ ໃນເງື່ອນໄຂພິເສດທີ່ສັບສົນທີ່ສຸດ ຂອງປະເທດຕົນ.

ພັກຍູແຮງວຽກງານໂຄສະນາ ໃນໝູ່ພົນທະຫານທີ່ຮັບໃຊ້ເຈົ້າຈັກກະວັດຫວຽດນາມ, ພົນປະກົດວ່າ ສະມາຄົມພົນທະຫານກູ້ຊາດຖືກສ້າງຕັ້ງຂຶ້ນ ແລະ ຖືກຮັບເອົ້າຫວຽດມິນ. ສະເພາະແຕ່ຢູ່ຮ່າໂນ້ຍ ເທົ່ານັ້ນ ພວກເຂົາໄດ້ສ້າງຕັ້ງໜ່ວຍຮັກຊາດຫລາຍໜ່ວຍ ທີ່ ເຄື່ອນໄຫວໃຕ້ດິນ ຢູ່ໃນກອງພົນໃຫຍ່ທະຫານລາບອິນດູຈີນ ເລກ ໑, ຢູ່ໃນກອງພົນປືນ ໃຫຍ່ເມືອງຂຶ້ນເລກ ໔ ກໍຄືຢູ່ໃນໝູ່ນາຍທະຫານຫວຽດນາມ ທີ່ສັງກັດກອງເສນາທິການ ຝະລັ່ງ ແລະ ຢູ່ເດີ່ນບິນທະຫານແບັກມາຍ.

ພັກໄດ້ປະກາດໃຊ້ໂຄງການດຳເນີນງານ ທີ່ມີຄວາມໝາຍອັນສຳຄັນທ່ວງທັນກັບ ເວລາ ນັ້ນແມ່ນຂໍ້ວິນິດໄສກ່ຽວກັບບັນຫາວັດທະນະທຳ, ເຊິ່ງໃນນັ້ນພັກໄດ້ຍົກ ໃຫ້ເຫັນ ໜ້າທີ່ຕໍ່ສູ້ເພື່ອວັດທະນະທຳ, ສິລະປະ ແລະ ວັນນະຄະດີຫວຽດນາມ ທີ່ມີຮູບການແຫ່ງ ຊາດ ແລະ ມີເນື້ອໃນປະຊາທິປະໄຕ. ມີນັກເຄື່ອນໄຫວວັດທະນະທຳຜູ້ກ້າວໜ້າ ຂອງ ຫວຽດນາມຫລາຍຄົນ ທີ່ໄດ້ເຫັນດີເຫັນພ້ອມນຳໂຄງການດຳເນີນງານດັ່ງກ່າວ, ໃນຈຳ ນວນນັ້ນໄດ້ມີນັກປະພັນ ທີ່ມີຊື່ສຽງເຊັ່ນ ຫງວຽນດິງທີ່, ນາມກາວ, ວຽນຮົ່ງ, ໂຕ ຮວາຍ, ຫງວຽນຕວນ. ເຂົາເຈົ້າໄດ້ສ້າງຕັ້ງສະມາຄົມກູ້ຊາດຂອງຜູ້ມີຄຸນວຸທິທາງດ້ານ ວັດທະນະທຳ.

ສຸດທ້າຍ ພັກກອມມູນິດອິນດູຈີນກໍວາງຄຳຂວັນສ້າງຕັ້ງແນວໂຮມແຫ່ງຊາດ ຕ້ານ ຍີ່ປຸ່ນອອກ ໂດຍພະຍາຍາມດຶງດູດເອົາຄົນຕ່າງປະເທດທີ່ຕ້ານຟາດຊິດ ນັບທັງຄົນຝະລັ່ງ ທີ່ເດີນຕາມຝ່າຍເດີໂກນ ເອົ້າມາຢູ່ໃນແນວໂຮມແຫ່ງຊາດ. ສິ່ງທີ່ຊຸກຍູ້ໃຫ້ພັກຕັດສິນໃຈ ແນວນັ້ນ ແມ່ນຄຳໝັ້ນສັນຍາຂອງເດີໂກນລົງວັນທີ ໘ ເດືອນທັນວາ ປີ ໑໗໔໓ ທີ່ວ່າ ພາຍຫລັງສົງຄາມ ຝະລັ່ງ ຈະຮັບປະກັນໃຫ້ປະເທດອິນດູຈີນມີອິດສະຫລະພາບ (ເປັນ

ທີ່ໜ້າເສຍໃຈວ່າ ຕໍ່ມາ ຄຳໝັ້ນສັນຍາດັ່ງກ່າວບໍ່ໄດ້ຖືກປະຕິບັດໃຫ້ເປັນຈິງ). ເພື່ອຈຸດປະສົງສ້າງຕັ້ງການຮ່ວມມືກັບຄົນຝະລັ່ງ ເຊິ່ງຕັດຂາດຈາກພວກວິຊີ ຢ່າງເດັດດ່ຽວ ແລະ ທີ່ຢືນຢູ່ໃຕ້ລົມທຸງສາມສີໄຂວ່ຕີນກາໂລແຣັງ ຂອງເດີໂກນນັ້ນ, ຄະນະນຳພາຂອງຫວຽດມິນ ໄດ້ຈັດຕັ້ງການພົບພໍ້ກັນຢ່າງປິດລັບຢູ່ຮ່າໂນ້ຍ ລະຫວ່າງຜູ້ຕາງໜ້າຂອງຕົນ ກັບຜູ້ຕາງໜ້າຂອງຊາວກອມມູນິດ, ກັບນັກສັງຄົມນິຍົມຝ່າຍຊ້າຍ ແລະ ຜູ້ທີ່ສັງກັດຝ່າຍເດີໂກນ ໃນກອງທະຫານຕ່າງດ້າວ ແລະ ອຳນາດການປົກຄອງທະຫານຂອງ ຝະລັ່ງ ຢູ່ອິນດູຈີນ. ຜູ້ຕາງໜ້າຂອງຫວຽດມິນ ສະເໜີໃຫ້ມີການປະສານສົມທົບ ການເຄື່ອນໄຫວໃນການຕໍ່ສູ້ຕ້ານພວກຂຸນເສິກຍີ່ປຸ່ນ, ຕ້ານພວກນິຍົມວິຊີ ແລະ ຮ້ອງຂໍ ໃຫ້ພວກທີ່ນິຍົມເດີໂກນ ທີ່ມີອຳນາດໃນກົງຈັກບໍລິຫານນັ້ນນຳໃຊ້ຄວາມອາດສາມາດຂອງຕົນເພື່ອໃຫ້ການຊ່ວຍເຫລືອຫວຽດມິນດ້ານເຄື່ອງບໍລິໂພກ ແລະ ອາວຸດ ທັງປົດປ່ອຍ ນັກໂທດການເມືອງ ແລະ ອື່ນໆ...ແຕ່ວ່າ ຍ້ອນຂາດສາຍຕາມອງກ້ວາງເຫັນໄກ ພວກທີ່ເດີນຕາມເດີໂກນ ຈຶ່ງບໍ່ຮ່ວມສຳພັນກັບຫວຽດມິນ.

...ຊົ່ວໂມງທຳອິດທີ່ກັບມາຮອດປາກບໍ່ ໂຮ່ຈິມິນ ໄດ້ສັງເກດເຫັນບັນຍາກາດອັນເບີກບານທີ່ປົກຄຸມຢູ່ແຫ່ງນັ້ນແລະຄວາມກະຕືລືລົ້ນຂອງຫົວຈັກຫລັກແຫລ່ງຂອງພັກ ຢູ່ທ້ອງຖິ່ນ. ປະກົດວ່າ ກ່ອນມື້ທີ່ເພິ່ນຈະກັບມາຮອດປາກບໍ່, ຄະນະບໍລິຫານງານຂອງອົງຄະນະພັກຂອງເຂດ ກາວບັ່ງ-ບັກການ-ລາງເຊິນ ໄດ້ໄຂກອງປະຊຸມເປີດກວ້າງ.ກອງປະຊຸມໄດ້ສະຫລຸບວ່າ: "ຈາກການໄຈ້ແຍກສະຖານະການໂລກ, ສະພາບການພາຍໃນປະເທດ ແລະ ການຂະຫຍາຍຕົວຂອງຂະບວນການປະຕິວັດ ຢູ່ແຂວງກາວບັ່ງ-ບັກການ-ລາງເຊິນ ໄດ້ຊີ້ໃຫ້ເຫັນວ່າ: ທຸກເງື່ອນໄຂສຳລັບການດຳເນີນການລຸກຮືຂຶ້ນ ປະກອບອາວຸດ ແລະ ປ່ຽນມາເປັນສົງຄາມກອງຫລອນ ຢູ່ສາມແຂວງດັ່ງກ່າວໄດ້ສຸກງອມແລ້ວ". ຍັງເຫລືອແຕ່ກຳນົດເວລາລຸກຮືຂຶ້ນເທົ່ານັ້ນ, ບັນຫາດັ່ງກ່າວຈະຖືກຕັດສິນຢູ່ກອງປະຊຸມທີ່ຈະມາເຖິງ. ໂຮ່ຈິມິນກັບມາຖືກກັບເວລາທີ່ສຸດ. ເມື່ອຊອກຮູ້ສະພາບການແລ້ວ ເພິ່ນຄັດຄ້ານການຕັດສິນໃຈດັ່ງກ່າວຢ່າງເດັດດ່ຽວ, ຍ້ອນວ່າມັນໄວໂພດ. ເພິ່ນຊີ້ໃຫ້ ພວກສະຫາຍເຫັນວ່າ ຖ້າຫລົງເມົາມົວກັບໄຊຊະນະແບບພາກສ່ວນແລ້ວ ກໍຈະເປັນ ອັນຕະລາຍທີ່ສຸດ. ເພິ່ນອະທິບາຍວ່າ:

"ແຜນການຂອງພວກສະຫາຍແມ່ນ ແນໃສ່ພັນຂະຫຍາຍການຕໍ່ສູ້ປະກອບອາວຸດຢູ່ສາມແຂວງພາກເຫນືອ ມັນອີງໃສ່ແຕ່ເງື່ອນໄຂຂອງທ້ອງຖິ່ນເທົ່ານັ້ນ ໂດຍບໍ່ຄຳນຶງເຖິງສະພາບອັນສັບສົນໃນທົ່ວປະເທດ ແລະ ຄວາມຈິງທີ່ວ່າ ກຳລັງຂອງສັດຕູຍັງຄົງ ຮັກສາຄວາມສາມາດສູ້ຮົບໄວ້ຢູ່, ສ່ວນກຳລັງປະຕິວັດຊ້ຳພັດແຕກກະຈັດກະຈາຍ. ພວກເຂົາເຈົ້າຍັງບໍ່ທັນມີອົງການຈັດຕັ້ງ, ພະນັກງານ ແລະ ອາວຸດ".

ເພິ່ນຢຸດເວົ້າອຶດໃຈດຽວ ບັດແລ້ວກໍ່ສືບຕໍ່ວ່າ:

"ໄລຍະແຫ່ງການຂະຫຍາຍຕົວຂອງການປະຕິວັດແບບສັນຕິ ໄດ້ຜ່ານພົ້ນໄປແລ້ວຂະນະດຽວກັນ ໄລຍະແຫ່ງການລຸກຮື່ຂຶ້ນທົ່ວປະເທດຊ້ຳພັດຍັງບໍ່ມາຮອດ. ເລນິນ ຜູ້ຍິ່ງໃຫຍ່ໄດ້ເວົ້າວ່າ ການລຸກຮື່ຂຶ້ນແມ່ນສິລະປະຢ່າງຫນຶ່ງ. ການລຸກຮື່ຂຶ້ນຮຽກຮ້ອງ ໃຫ້ມີການກະກຽມຢ່າງຮອບຄອບທີ່ສຸດ, ທຸກໆການກະທຳຟ້າວຟັ່ງ, ບໍ່ຄິດຫນ້າຄິດຫລັງ ລ້ວນແຕ່ບໍ່ຖືກກາລະເທສະ ແລະ ເປັນອັນຕະລາຍ", ຫລັງຈາກຄົ້ນຄິດຫນຶ່ງນາທີ ເພິ່ນເວົ້າຕໍ່ຢ່າງເດັດຂາດວ່າ: "ແນ່ນອນແລ້ວ ຖ້າວ່າໃນປະຈຸບັນພວກເຮົາຈຳກັດຢູ່ພຽງແຕ່ ໃນການຕໍ່ສູ້ທາງການເມືອງເທົ່ານັ້ນ ກໍ່ເປັນອັນຈະແຈ້ງວ່າມັນບໍ່ທັນພຽງພໍເພື່ອຂະຫຍາຍຂະບວນການປະຕິວັດ. ແຕ່ຖ້າວ່າພວກເຮົາກ້າວໄປສູ່ການລຸກຮື່ຂຶ້ນປະກອບອາວຸດນັ້ນມັນຈະສ້າງຄວາມເສຍຫາຍຫລາຍກວ່າ, ຍ້ອນວ່າປະຈຸບັນກອງທັບສັດຕູຍັງມີກຳລັງພຽງພໍເພື່ອປາບປາມການລຸກຮື່ຂຶ້ນຢ່າງປ່າເຖື່ອນ. ຂ້າພະເຈົ້າຄິດວ່າ ພວກເຮົາໄດ້ຫຍັບເຂົ້າ ໃກ້ກັບຊ່ວງໄລຍະ ເຊິ່ງໃນນັ້ນບໍ່ພຽງແຕ່ສາມາດແຕ່ຫາກຍັງຕ້ອງປ່ຽນຈາກການຕໍ່ສູ້ ດ້ານການເມືອງ ມາເປັນການຕໍ່ສູ້ປະກອບອາວຸດ. ແຕ່ວ່າໃນຊ່ວງໄລຍະນີ້, ພວກເຮົາຕ້ອງເອົາໃຈໃສ່ເປັນພິເສດ ນຳການຕໍ່ສູ້ດ້ານການເມືອງ. ເວລານີ້ ສິ່ງທີ່ມີຄວາມສຳຄັນສຳລັບພວກເຮົາແມ່ນຕ້ອງຊອກຫາຮູບການແຫ່ງການເຄື່ອນໄຫວປະຕິວັດໃຫມ່ ທີ່ຕອບສະຫນອງກັບສະພາບການອັນສັບສົນໃນປະຈຸບັນ".

ນອກຈາກວຽກງານປະຈຳວັນແລ້ວ ໂຮ່ຈີມິນ ກໍຍັງຄົ້ນຄິດຫລາຍກ່ຽວກັບ ແນວ-ທາງຊຶ່ງພັກ ແລະ ຫວຽດມິນຕ້ອງປະຕິບັດຕາມ ໃນເມື່ອເງື່ອນໄຂຕໍ່ສູ້ປະກອບອາວຸດສຸກງອມແລ້ວ ແຕ່ສັດຕູຍັງແຂງແຮງ, ຍັງເປັນກຳລັງທີ່ເປັນຕາຢ້ານ ເຖິງວ່າເປື່ອຍເຍື່ອຍຢູ່ພາຍໃນກໍຕາມ. ເພິ່ນຫວນຄືນເຖິງການເຄື່ອນໄຫວອັນອົງອາດກ້າຫານຂອງບັນດາ ຜູ້ບັນຊາການຂອງກອງທັບຫວຽດນາມສະໄຫມກາງ ຕ້ານການຮຸກຮານຂອງພວກສັກດິນາ-ຈີນ. ເຂົາເຈົ້າຈັດຕັ້ງກຳລັງປະກອບອາວຸດປະຊາຊົນເປັນກອງທັບທະຫານລຸກຮື່ຂຶ້ນແລະ

ດຳເນີນການຕໍ່ສູ້ປົດປ່ອຍ ພາຍໃຕ້ຄຳຂວັນວ່າ "ທົ່ວປວງຊົນແມ່ນນັກຮົບ". ບົດຮຽນຂອງພັກກອມມູນິດ (ໂບນເຊວິກ) ແຫ່ງສະຫະພາບໂຊວຽດ ກໍຍັງໄດ້ຊີ້ໃຫ້ເພິ່ນ ເຫັນວ່າຄວາມເຂັ້ມແຂງຂອງການປະຕິວັດໃດໆບໍ່ວ່າຈະເປັນການປະຕິວັດຊາດ ປະຊາທິປະໄຕຫຼືການປະຕິວັດສັງຄົມນິຍົມກໍຕາມ ແມ່ນນອນຢູ່ໃນການປະກອບອາວຸດໃຫ້ທົ່ວປວງຊົນ,ການສ້າງຕັ້ງກຳລັງປະກອບອາວຸດຂອງປະຊາຊົນ. ແມ່ນກະທັ້ງຊຸມປີແຫ່ງການປະຕິວັດ ລັດເຊຍຄັ້ງທີໜຶ່ງພຸ້ນ ວ.ອີ.ເລນິນ ກໍໄດ້ຂຽນໄວ້ວ່າ: "ບໍ່ມີກຳລັງອັນໃດຢູ່ໃນໂລກນີ້ທີ່ກາທຳລາຍປະເທດລັດເຊຍອິດສະຫລະພາບ, ຖ້າວ່າກຳແພງເພັດຂອງອິດສະຫລະພາບດັ່ງກ່າວ ແມ່ນປະຊາຊົນປະກອບອາວຸດ ທີ່ໄດ້ກົບລ້າງຂັ້ນວັນນະຊຸນເສິກ ທັງເຮັດໃຫ້ ທະຫານໝົດທຸກຄົນກາຍເປັນພົນລະເມືອງ ແລະ ໃນທາງກົງກັນຂ້າມ ກໍເຮັດໃຫ້ ພົນລະເມືອງໝົດທຸກຄົນທີ່ສາມາດກຳປືນຕໍ່ສູ້ໄດ້ນັ້ນກາຍເປັນທະຫານ "*.

ເວົ້າລວມແລ້ວ, ແນວທາງກໍ່ສ້າງກອງທັບປົດປ່ອຍປະຊາຊົນ ທີ່ມີລັກສະນະ ມະຫາຊົນເປັນສິ່ງທີ່ຖືກຕ້ອງທີ່ສຸດ. ບົດຮຽນຂອງການປະຕິວັດລັດເຊຍ ແລະ ການປະຕິວັດຈີນ ລ້ວນແຕ່ຊີ້ອອກໃຫ້ເຫັນດີແນວນັ້ນ, ນອກຈາກນັ້ນແນວທາງດັ່ງກ່າວຍັງແທດເໝາະທີ່ສຸດ ກັບມູນເຊື້ອຕໍ່ສູ້ອັນຍາວນານຂອງປະຊາຊົນຫວຽດນາມ ຕ້ານພວກຮຸກຮານ ຕ່າງດ້າວ. ໃນດ້ານນີ້ໄດ້ເຮັດມາຫລາຍແລ້ວ. ເພິ່ນຫວນຄືນວ່າເລີ່ມແຕ່ທ້າຍປີ໑໙໔໑ ກອງກຳລັງປະກອບອາວຸດທຳອິດໄດ້ຖືກສ້າງຕັ້ງຂຶ້ນ, ກອງນີ້ມີໜ້າທີ່ປົກປັກຮັກສາກອງເສນາທິການຂອງພັກ ແລະ ຊີ້ນຳນຳພາການຝຶກແອບການທະຫານໃຫ້ແກ່ໜ່ວຍທະຫານ ລາດກອງຫລອນໃນສະມາຄົມກູ້ຊາດ. ຕໍ່ມາ ໜ່ວຍກຳລັງປະກອບອາວຸດອື່ນໆກໍໄດ້ປະກົດຕົວຂຶ້ນຕື່ມອີກ. ເດືອນສິງຫາ ປີ ໑໙໔໓ ຢູ່ໃຈກາງ "ຊ່ອງແຄບ" ທີ່ຕິດຈອດກັນລະຫວ່າງແຂວງກາວບັງ ກັບທາຍງວຽນນັ້ນ, ກຳລັງປະກອບອາວຸດຮັກຊາດສອງກອງໄດ້ພົບພໍ້ກັນໂດຍເຊື່ອມຈອດສອງຖານທີ່ໝັ້ນປະຕິວັດໃຫຍ່ເຂົ້າກັນ ພາຍຫລັງມາສິ່ງດັ່ງກ່າວ ໄດ້ປະກອບສ່ວນໃຫ້ແກ່ການສ້າງຕັ້ງເຂດປົດປ່ອຍອັນກວ້າງໃຫຍ່.

ແຕ່ໃນໄລຍະນັ້ນ ກຳລັງປະກອບອາວຸດຂອງຫວຽດມິນ ຍັງບໍ່ມີຄວາມສາມາດສຳເລັດພາລະບົດບາດໂດຍກົງດ້ານການທະຫານ ເນື່ອງຈາກຍັງຂາດເຂີນອາວຸດ ແລະ ຜູ້ຊຳນານງານໃນການສູ້ຮົບ. ແນ່ນອນແລ້ວວ່າສິ່ງດັ່ງກ່າວນັ້ນຈະມີຂຶ້ນເທື່ອລະນ້ອຍ.ສ່ວນ

---

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໑໘, ໜ້າ ໑໑໘.(ເປັນພາສາລັດເຊັຍ)

ເວລານີ້ ຕ້ອງໄດ້ເຄື່ອນໄຫວອີກແບບໜຶ່ງ ຊຶ່ງອາດຈະປຸກລະດົມຂົນຂວາຍເອົາ ມະຫາຊົນໄດ້ຢ່າງກວ້າງຂວາງ, ເຮັດໃຫ້ເອົາເຈົ້າເຫັນແຈ້ງຄວາມສາມາດສູ້ຣົບຂອງ ກຳລັງປະຕິວັດ, ກຳຈັດຄວາມຢ້ານກົວຂອງຄົນທີ່ມີຕໍ່ພະລັງແຮງອັນປອມແປງຂອງກອງທັບສັດຕູ ລົບລ້າງຄວາມລະແວງສົງໄສຕໍ່ຄວາມສາມາດຢ່າງບໍ່ມີຂອບເຂດຂອງປະຊາຊົນ ໃນເມື່ອເອົາເຈົ້າລຸກຮືຂຶ້ນຕໍ່ສູ້ ຢ່າງເດັດດ່ຽວ. ຟ.ອັງແກນ ໄດ້ເວົ້າຢ່າງຖືກຕ້ອງທີ່ສຸດ ກ່ຽວກັບຊາວປີເອມິງ ທີ່ລຸກຮືຂຶ້ນຕ້ານແອກຄອບຄອງຂອງຈັກກະພັດໂອຕະຣິດວ່າ: "ປະຊາຊົນໜຶ່ງທີ່ຢາກຍາດເອົາເອກະລາດນັ້ນ ບໍ່ຄວນຈຳກັດຕົນຢູ່ແຕ່ແບບວິທີດຳເນີນສົງຄາມແບບທຳມະດາ. ການລຸກຮືຂຶ້ນຂອງມະຫາຊົນ, ສົງຄາມປະຕິວັດ, ບັນດາໜ່ວຍກອງຫລອນຢູ່ທົ່ວທຸກແຫ່ງ ອັນນັ້ນແມ່ນວິທີດຽວເທົ່ານັ້ນ ຊຶ່ງຊ່ວຍໃຫ້ປະຊາຊົນຊາດໜຶ່ງເຖິງຈະນ້ອຍກໍອາດສາມາດຕີປະຊາຊົນຊາດໃຫຍ່ກວ່າໄດ້, ຊ່ວຍໃຫ້ກອງທັບທີ່ບໍ່ມີກຳລັງຫລາຍພໍປານໃດ ສາມາດຕ້ານຢັນກັບກອງທັບທີ່ມີກຳລັງຫລາຍກວ່າ ແລະ ມີການຈັດຕັ້ງດີກວ່າໃຫ້ປະລາໄຊ"*.

"ບໍ່ຄວນຈຳກັດຢູ່ແຕ່ແບບວິທີ ດຳເນີນສົງຄາມແບບທຳມະດາ, ສຳລັບພວກເຮົາໝາຍເຖິງວິທີການກະກຽມການປະຕິວັດ, ຢູ່ພາຍໃຕ້ເງື່ອນໄຂພິເສດຂອງ ຫວຽດນາມຍຸດໂທບາຍຂອງພັກຄວນຈະຕ້ອງເປັນຄືແນວນີ້". ໂຮ່ຈີມິນໄດ້ໄປຮອດບ່ອນສະຫລຸບວ່າ: ຍຸດໂທບາຍອັນເໝາະສົມທີ່ສຸດ ແລະ ມີໝາກຜົນທີ່ສຸດ ແມ່ນການປະສານສົມທົບ ຮູບການຕໍ່ສູ້ດ້ານການເມືອງ ກັບການຕໍ່ສູ້ປະກອບອາວຸດຢ່າງປະດິດສ້າງຢ່າງມີໄຫວພິບ,ແນ່ນອນແລ້ວວ່າ ໃນສອງຮູບການດັ່ງກ່າວຕ້ອງເອົາຮູບການອັນໃດອັນໜຶ່ງໄປກ່ອນໂດຍຂຶ້ນກັບການຂະຫຍາຍຕົວຂອງສະພາບການຕົວຈິງ. ເພິ່ນຄິດວ່າ ເພື່ອໃຫ້ຍຸດໂທບາຍ ດັ່ງກ່າວກາຍເປັນຈິງ ເດັດຂາດກໍຕ້ອງຈັດຕັ້ງໜ່ວຍປະກອບອາວຸດ ເຊິ່ງດ້ານໜຶ່ງດຳເນີນການໂຄສະນາດ້ານການເມືອງໃນໝູ່ປະຊາຊົນ, ອີກດ້ານໜຶ່ງ ດ້ວຍການບຸກໂຈມຕີທາງທະຫານຢ່າງບັງອາດຕ້ານພວກຣຸກຮານ, ເຮັດແນວນັ້ນຈະເຮັດໃຫ້ປະຊາຊົນ ເຊື່ອໝັ້ນໃນກຳລັງຂອງຕົນ, ໃນພະລັງແຮງຊຶ່ງນັບວັນນັບເພີ່ມຂຶ້ນ ຂອງການປະຕິວັດ, ໃນຄວາມສາມາດຕີຊະນະສັດຕູ .

ວັນທີ ໒໒ ເດືອນທັນວາ ປີ ໑໙໔໔ ໂຮ່ຈີມິນ ເຊັນຄຳສັ່ງຊີ້ນຳ ກ່ຽວກັບ ການສ້າງຕັ້ງ "ໜ່ວຍໂຄສະນາປະກອບອາວຸດຂອງກອງທັບປົດປ່ອຍຫວຽດນາມ". ເພິ່ນຂຽນ

---

* ກ.ມາກ,ຟ.ອັງແກນ.ນິພົນຄົບຊຸດ, ເຫລັ້ມ ໖, ໜ້າ ໔໑໗.(ເປັນພາສາລັດເຊຍ)

ວ່າ ຊີ້ດັ່ງກ່າວ "ໜ່ວຍດັ່ງກ່າວເອົາວຽກການເມືອງໄປກ່ອນວຽກງານການທະຫານ". ມັນແມ່ນໜ່ວຍໂຄສະນາເປັນຕົ້ນຕໍ...

ສະນັ້ນ ຈຶ່ງຈະຕ້ອງເລືອກເຟັ້ນເອົານັກຮົບທີ່ເດັດດ່ຽວ, ກ້າຫານທີ່ສຸດ ຢູ່ໃນຖັນແຖວຊາວກອງຫລອນ ເພື່ອສ້າງຕັ້ງເປັນໜ່ວຍຫລັກແຫລ່ງ ໂດຍປະກອບອາວຸດ ສ່ວນໃຫຍ່ທີ່ມີຢູ່ໃຫ້ໜ່ວຍນີ້...

ຍ້ອນວ່າຂະບວນການຕໍ່ຕ້ານຂອງພວກເຮົາ ແມ່ນສົງຄາມທົ່ວປວງຊົນ ຈຶ່ງຕ້ອງປຸກລະດົມທົ່ວປວງຊົນຈັບອາວຸດລຸກຮືຂຶ້ນ. ສະນັ້ນ ໃນຂະນະທີ່ສຸມກຳລັງໃສ່ການສ້າງຕັ້ງໜ່ວຍໂຄສະນາຫລັກແຫລ່ງດັ່ງກ່າວ ກໍ່ຕ້ອງຮັກສາກຳລັງປະກອບອາວຸດໄວ້ຢູ່ໃນທ້ອງຖິ່ນ, ກຳລັງດັ່ງກ່າວຈະເຄື່ອນໄຫວຄຽງບ່າຄຽງໄຫລ່ ແລະ ຊ່ວຍເຫລືອໜ່ວຍໂຄສະນາ ດັ່ງກ່າວຢ່າງເຕັມທີ່.

ກ່ຽວກັບຍຸດທະວິທີສູ້ຮົບ: ຕ້ອງໝູນໃຊ້ວິທີການແບບກອງຫລອນ, ໝາຍຄວາມວ່າ ໜ່ວຍນີ້ຕ້ອງເຄື່ອນໄຫວຢ່າງປິດລັບວ່ອງໄວ ບຸກຕີກ່ອນ, ເຄື່ອນທັບມື້ນີ້ ຢູ່ຕາເວັນອອກ ມື້ອື່ນຢູ່ຕາເວັນຕົກ. ໜ່ວຍນີ້ຕ້ອງຮູ້ຈັກໂປໂລຂຶ້ນຢ່າງກະທັນຫັນ ແລະ ລອບໜີໂດຍບໍ່ປະຮ່ອງຮອຍ".

"ໜ່ວຍໂຄສະນາປະກອບອາວຸດ" ໜ່ວຍທຳອິດໂດຍແມ່ນສະຫາຍ ຫວໍຫາງວຽນຢາບ ເປັນຜູ້ບັນຊາການ ໃນເບື້ອງຕົ້ນມີນັກຮົບພຽງແຕ່ ໓໔ ຄົນ. ໜ່ວຍໄດ້ປະກອບອາວຸດປືນກົນເບົາໜຶ່ງກະບອກ ປືນເຫລັກຍາວ ໑໗ ກະບອກ ປືນສັ້ນ ໒ ກະບອກ ປືນຍິງດ້ວຍຊະນວນ ໑໔ ກະບອກ. ກ່ອນມື້ທີ່ນັກຮົບຈະທຳພິທີປະຕິຍານ ຫວໍຫາງວຽນຢາບໄດ້ຮັບຈົດໝາຍນ້ອຍ ຈາກ ໂຮ່ຈີມິນ ຊຶ່ງມີແຕ່ສອງສາມແຖວເທົ່ານັ້ນທີ່ຂຽນຢູ່ເທິງແຜ່ນເຈ້ຍນ້ອຍໆເອົາໃສ່ໄວ້ໃນຊອງກອກຢາ ທີ່ມີເນື້ອໃນດັ່ງຕໍ່ໄປນີ້: "ຈົ່ງຈື່ໄວ້ວ່າໜ່ວຍໂຄສະນາປະກອບອາວຸດນີ້ ຈະຕ້ອງທຳການໂຄສະນາຫລາຍກວ່າທຳການສູ້ຮົບ. ອາດເວົ້າໄດ້ວ່າ ໜ່ວຍຂອງພວກສະຫາຍເໝືອນກັບອ້າຍກົກ, ຂ້າພະເຈົ້າມີຄວາມຫວັງວ່າ ໃນບໍ່ຊ້ານີ້ ໜ່ວຍໂຄສະນາດັ່ງກ່າວຈະມີໜ່ວຍຮຸ່ນນ້ອງອື່ນໆ. ເຖິງວ່າໃນເບື້ອງຕົ້ນໜ່ວຍໂຄສະນາມີນັກຮົບຈຳນວນນ້ອຍຢູ່ກໍ່ຕາມ ແຕ່ວ່າອະນາຄົດຂອງມັນ ຈະສະຫວ່າງສະໄຫວທີ່ສຸດ. ມັນແມ່ນໜໍ່ແໜງຂອງກອງທັບປົດປ່ອຍໃນອະນາຄົດ, ຊື່ສຽງອັນໂດ່ງດັງ ຂອງມັນຈະດັງກ້ອງສະໜັ່ນໄປທົ່ວປະເທດຫວຽດນາມພວກເຮົາ ແຕ່ໃຕ້ຫາເໜືອສຸດ".

ຢູ່ໃນຊີວິດຍ່ອມມີການປ່ຽນແປງຢູ່ສະເໝີ. ຫລັງຈາກການສ້າງຕັ້ງ ສອງວັນ

ໜ່ວຍໂຄສະນາປະກອບອາວຸດ ໄດ້ມີໂອກາດສະແດງໃຫ້ເຫັນເຖິງຄວາມສາມາດ ສູ້ຮົບຂອງມັນ. ໜ່ວຍໂຄສະນາໄດ້ບຸກໂຈມຕີຢ່າງບັງອາດ ໃສ່ປ້ອມຍາມຂອງພວກລ່າເມືອງຂຶ້ນ ຢູ່ທີ່ເມືອງ ຟາຍອັດ ແລະ ນາເງິນ. ພວກບັນຊາການຂອງປ້ອມຍາມເຫລົ່ານັ້ນຖືກຂ້າຕາຍ, ທະຫານຢູ່ໃນປ້ອມຍາມຖືກຈັບເປັນຊະເລີຍເສິກ. ໜ່ວຍໂຄສະນາ ຍຶດເອົາອາວຸດໄດ້ຢ່າງຫລວງຫລາຍ. ຂ່າວການຕີເອົາຊະນະຄັ້ງທຳອິດດັ່ງກ່າວໄດ້ແຜ່ ກະຈາຍໄວປານລົມກົດ ໃນໝູ່ປະຊາຊົນເຂດກອງຫລອນ ແລະ ກໍ່ເກີດໃຫ້ມີຄື້ນແຫ່ງຄວາມກະຕືລືລົ້ນ ແຫ່ງຄວາມເບີກບານມ່ວນຊື່ນຢ່າງບໍ່ເຄີຍມີມາກ່ອນ. ພຽງແຕ່ໜຶ່ງອາທິດຈາກນັ້ນ ໜ່ວຍຂອງ ຫວໍຫງວຽນຢ່າບ ກໍ່ຂະຫຍາຍເປັນໜ່ວຍໜຶ່ງທີ່ມີຂະໜາດກອງຮ້ອຍ.

ຄຳສັ່ງຊີ້ນຳຂອງໂຮ່ຈີ່ມິນ ກ່ຽວກັບການສ້າງຕັ້ງ "ໜ່ວຍໂຄສະນາປະກອບອາວຸດ" ໄດ້ກາຍເປັນແນວທາງລວມຂອງຊາວກອມມູນິດຫວຽດນາມ ກ່ຽວກັບບັນຫາ ການທະຫານ. ຫລັກການສຳຄັນທີ່ສຸດຂອງທິດສະດີ ມາກ-ເລນິນ ກ່ຽວກັບການສົມທົບ ລະຫວ່າງຮູບການຕໍ່ສູ້ດ້ານການເມືອງ ແລະ ການຕໍ່ສູ້ປະກອບອາວຸດ ໃນເວລາກະກຽມປະຕິວັດນັ້ນ ໄດ້ຖືກໂຮ່ຈີ່ມິນ ນຳມາເສີມຂະຫຍາຍຢ່າງປະດິດສ້າງໂດຍໃຫ້ສອດຄ່ອງ ກັບເງື່ອນໄຂຕົວຈິງຂອງຫວຽດນາມນັ້ນ, ເປັນພື້ນຖານໃຫ້ແກ່ການເຄື່ອນໄຫວຈັດຕັ້ງ ແລະການເມືອງຂອງພັກ ທັງໃນເວລາກະກຽມການປະຕິວັດເດືອນສິງຫາ ກໍ່ຄືໃນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງ. ຫລາຍປີຕໍ່ມາ ໃນການຕໍ່ສູ້ຢ່າງມີໄຊເພື່ອປົດປ່ອຍຫວຽດນາມພາກໃຕ້ ອອກຈາກພວກຈັກກະພັດຮຸກຮານ ແລະພວກລູກແຫລ້ງຕີນມືຂອງພວກເຂົາ ຊາວກອມມູນິດ ຫວຽດນາມ ຍາດເອົາຜົນສຳເລັດອັນສະຫງ່າງາມເປັນພິເສດມາໄດ້ໃນການປະຕິບັດຢ່າງສະເໝີຕົ້ນສະເໝີປາຍ ຍຸດໂທບາຍປະສານສົມທົບດ້ານຕ່າງໆ ຢ່າງຄ່ອງແຄ້ວ ດີທາງດ້ານການປະກອບອາວຸດ ການເມືອງ ແລະ ການທູດ.

໖

ເຖິງຢ່າງໃດກໍດີ ໃນຂະນະທີ່ສົງຄາມໂລກຈະຈົບສິ້ນລົງ ດ້ວຍຄວາມເສຍຫາຍອັນໜັກໜ່ວງ ສຳລັບພວກຟາຊິດຜູ້ຮຸກຮານ, ຄວາມຂັດແຍ່ງລະຫວ່າງຍີ່ປຸ່ນ ກັບຝະລັ່ງຢູ່ຫວຽດນາມ ຍິ່ງນັບວັນນັບດຸເດືອດເຜັດຮ້ອນ. ພວກຂຸນເສິກຍີ່ປຸ່ນເລີ່ມກັງວົນ ຢ່າງຈິງ

ຈຶ່ງວ່າ ໃນກໍລະນີທີ່ກຳລັງປະກອບອາວຸດຂອງພັນທະມິດອັງກິດ-ອາເມລິກາ ຍຶກພື້ນຍືນ ບົກ ຫວຽດນາມນັ້ນ ກອງທັບຝະລັ່ງອາດຈະໂມ່ງບາດຄ້ອນດັກຕີທັກຫລັງພວກເຂົາກໍ່ເປັນໄດ້. ມີເຫດຜົນຫລາຍທີ່ສຸດ ທີ່ເຮັດໃຫ້ຍີ່ປຸ່ນກັງວົນຄືຈັ່ງຊັ້ນ. ອີງຕາມເອກະສານ ການສືບຂ່າວຂອງຍີ່ປຸ່ນນັ້ນ ເລີ່ມແຕ່ເດືອນມິຖຸນາ ປີ ໑໙໔໔, ເຮືອບິນອັງກິດໄດ້ສົ່ງ ຜູ້ຕາງໜ້າຂອງເດີໂກນ ໂດດຈ້ອງລົງເຂດຊາຍແດນຈີນ-ຫວຽດ. ເຂົາໄດ້ວົມທາວ ຢ່າງປິດລັບເຊົ້າຮ່າໂນ້ຍ ແລະ ມອບຄຳສັ່ງຂອງເດີໂກນໃຫ້ນາຍພົນ ມອັກດັງ. ອີງຕາມຄຳສັ່ງດັ່ງກ່າວ ກອງທັບຝະລັ່ງຢູ່ອິນດູຈີນ ຕ້ອງບຸກໂຈມຕີທະຫານຍີ່ປຸ່ນ ຖ້າວ່າໂອກາດອຳນວຍ ເພື່ອວ່າຮອດມື້ທີ່ທະຫານພັນທະມິດໄດ້ໄຊຊະນະແລ້ວ ຈະໄດ້ຟື້ນຟູອຳນາດປົກຄອງ ຂອງຝະລັ່ງຢູ່ແຫ່ງນີ້ຄືນ. ມອັກດັງ ກໍຣີບອ້າງເຫດຜົນວ່າ ຕົນເຖົ້າແກ່ແລ້ວ, ສະນັ້ນຈຶ່ງຮ້ອງຂໍຖອນຕົວ ອອກຈາກໜ້າທີ່ເປັນຜູ້ບັນຊາການສູງສຸດຂອງກຳລັງທະຫານຝະລັ່ງຢ່າງເປັນທາງການ. ແລ້ວ ມອັກດັງ ເອງ ກໍເລີ່ມກະກຽມການລຸກຮື້ອນ ຕ້ານຍີ່ປຸ່ນ. ທ້າຍປີ ໑໙໔໔-ຕົ້ນປີ ໑໙໔໕ ເຮືອບິນອັງກິດ-ອາເມລິກາ ໄດ້ນັບມື້ນັບສົ່ງຄົນ ແລະ ອາວຸດໂດດຈ້ອງລົງໄປຊ່ວຍເຫລືອພວກຝະລັ່ງ ທີ່ເປັນໃຈເດີໂກນ ຢູ່ບາງເຂດທີ່ເປັນ ດິນແດນຂອງຫວຽດນາມ ແລະ ລາວ ບ່ອນທີ່ອຳນາດປົກຄອງຍີ່ປຸ່ນກວດກາຍາກ.

ເມື່ອໄດ້ຮັບຂ່າວຄາວດັ່ງກ່າວ ແລະ ຍ້ອນຄວາມປະລາໄຊອັນໜັກໜ່ວງ ຂອງກອງທັບເຮືອຍີ່ປຸ່ນ ຢູ່ມະຫາສະໝຸດປາຊີຟິກ ກອງບັນຊາການຍີ່ປຸ່ນ ຈຶ່ງລົງມືກະກຽມບັ້ນຮົບດັບສູນກົງຈັກການເມືອງ-ການທະຫານຂອງຝະລັ່ງຢູ່ອິນດູຈີນ. ໜ້າທີ່ດັ່ງກ່າວ ປະຕິບັດໄດ້ຢ່າງງ່າຍດາຍ ຍ້ອນວ່າ ຕົ້ນປີ ໑໙໔໔ ພວກຍີ່ປຸ່ນຍັງບໍ່ຈຳເປັນຕ້ອງນັບຖືຄຳໝັ້ນສັນຍາທີ່ມີຕໍ່ "ລັດຖະບານທີ່ເປັນພັນທະມິດ" ຂອງວີຊີ ອີກແລ້ວ ເພາະວ່າພາຍຫລັງ ທີ່ປະເທດຝະລັ່ງໄດ້ຖືກປົດປ່ອຍອອກຈາກແອກຍຶດຄອງຂອງຟາດຊິດຣິດແລ້ວ ລັດຖະບານ ນີ້ໄດ້ຖືກຍຸບເລີກ. ວັນທີ ໙ ເດືອນມີນາ ປີ ໑໙໔໕ ກຳລັງທະຫານຍີ່ປຸ່ນ ໄດ້ບຸກໂຈມຕີຢ່າງກະທັນຫັນຄ້າຍທະຫານຝະລັ່ງຢູ່ທົ່ວອິນດູຈີນ. ຍັງບໍ່ທັນຮອດສອງຊົ່ວໂມງ ຈາກນັ້ນກຳລັງປະກອບອາວຸດສ່ວນໃຫຍ່ຂອງຝະລັ່ງ ກໍ່ຖືກດັບສູນ ແລະ ຖືກຈັບເປັນ ຊະເລີຍເສິກ.

ທະຫານຝະລັ່ງທີ່ແຕກທັບແລ່ນປົບໜີໄປ ຈີນ ຜ່ານເຂດກວດກາຂອງຫວຽດມິນ. ຢູ່ແຂວງບັກການ ໜ່ວຍໂຄສະນາປະກອບອາວຸດໄດ້ເຈລະຈາກັບຜູ້ບັນຊາການ ກອງທະຫານຝະລັ່ງຄືນໜຶ່ງ ແລະ ຍັງກວ່ານັ້ນຍັງຕົກລົງກັນສ້າງຕັ້ງຄະນະກຳມະການ ຝະລັ່ງ-

ຫວຽດ ຕ້ານຍີ່ປຸ່ນ. ແຕ່ລະນະ ກຳມະການດັ່ງກ່າວ ພໍ່ແຕ່ຖືກສ້າງຂຶ້ນກໍ່ຖືກ ທັບມ້າງໂລດ. ສອງສາມມື້ຕໍ່ມາ ທະຫານຝະລັ່ງໄດ້ປົບໜີຜ່ານຊາຍແດນຈີນ ໂດຍປະອາວຸດຈຳນວນໜຶ່ງໄວ້ໃຫ້ຄົນຫວຽດນາມ. ທະຫານຝະລັ່ງອີກສົ່ນຂວັນເສຍ, ສ່ວນນາຍທະຫານພັດຈົ່ມທຸກຈົ່ມຍາກ ກ່ຽວກັບຊີວິດຫຍຸ້ງຍາກຢູ່ໃນເຂດຊົນນະບົດ. ແຕ່ອັນສຳຄັນ ແມ່ນຢູ່ບ່ອນວ່າ ອະດີດ ພວກລ່າເມືອງຂຶ້ນຢ້ານຫວຽດມິນຫລາຍກວ່າຍີ່ປຸ່ນ, ເພາະວ່າ ຫວຽດມິນ ບໍ່ມີເຈດຕະນາປິດອຳເປົ້າໝາຍອັນສູງສົ່ງຂອງການຕໍ່ສູ້ຂອງຕົນ ເພື່ອໃຫ້ ປະເທດຫວຽດນາມມີອະທິປະໄຕ ແລະ ມີເອກະລາດ ທີ່ປາດສະຈາກແອກຄອບຄອງ ຂອງຕ່າງປະເທດ. ເມື່ອປະຕິເສດການຮ່ວມມືກັບຫວຽດມິນ ຜູ້ບັນຊາການທະຫານຝະລັ່ງ ແລະ ບັນດານາຍທະຫານທີ່ຢູ່ໃຕ້ອຳນາດຂອງເຂົາ ໄດ້ປະຕິບັດຕາມຄຳສັ່ງຂອງເດີໂກນ ຜູ້ນຳ "ປະເທດຝະລັ່ງອິດສະຫລະ" ຢ່າງເຕັມສ່ວນ. ວັນທີ ໘ ເດືອນກຸມພາປີ ໑໙໔໔ ຢູ່ບະຣາຊາວິນ, ນາຍພົນເດີໂກນ ໄດ້ອອກຖະແຫລງການ ກ່ຽວກັບນະໂຍບາຍໃນອະນາຄົດຂອງຝະລັ່ງ ຢູ່ອິນດູຈີນ. ອີງຕາມແຜນການຂອງນາຍພົນ ເດີໂກນ ອິນດູຈີນ ຕ້ອງກາຍເປັນສະຫະພັນໜຶ່ງທີ່ມີຫ້າລັດ: ລາວ, ຂະແມ, ບັກກີ່, ນາມກີ່ ແລະ ຈຸງກີ່ໂດຍມີ "ຜູ້ມີອຳນາດເຕັມຂອງຝະລັ່ງ" ເປັນຫົວໜ້າ. ແຜນການຂອງເດີໂກນ ຊີ້ໃຫ້ເຫັນວ່າ ນະໂຍບາຍລ່າເມືອງຂຶ້ນຂອງຈັກກະພັດຝະລັ່ງກ່ຽວກັບອິນດູຈີນ ໂດຍສະເພາະແມ່ນຫວຽດນາມ, ໃນຕົວຈິງນັ້ນຍັງຄົງບໍ່ປ່ຽນແປງ.

ໂຮ່ຈີມິນ ນັກຮັກຊາດຜູ້ຍິ່ງໃຫຍ່ຂອງຫວຽດນາມ ໄດ້ຍື່ນມືຢ່າງຈິງໃຈໄປຫາ ເດີໂກນ ນັກຮັກຊາດຜູ້ຍິ່ງໃຫຍ່ຂອງຝະລັ່ງ. ແຕ່ວ່າ ເດີໂກນ ບໍ່ຍອມສຳຜັດມືຂອງ ໂຮ່ຈີມິນ. ລັດທິຮັກຊາດຂອງບຸກຄົນສອງຄົນຜູ້ມີຊື່ສຽງນັ້ນແຕກຕ່າງກັນທີ່ສຸດ. ພວກເຂົາຢູ່ຄົນລະຝ່າຍທີ່ເປັນປໍລະປັກກັນ, ເຖິງແມ່ນວ່າປັດໃຈຊາດ, ແນວຄິດເອກະພາບ ແຫ່ງຊາດໃນການຕໍ່ສູ້ ເພື່ອຟື້ນຟູຊາດ ລ້ວນແຕ່ໄດ້ກາຍເປັນຄວາມໝາຍສຳຄັນ ໃນຊີວິດການເມືອງຂອງທັງສອງຄົນ. ຖ້າວ່າລັດທິຮັກຊາດຂອງໂຮ່ຈີມິນມີລັກສະນະປະຊາຊົນ ກ້າວໜ້າ ແລະ ມຸ່ງໜ້າໄປສູ່ອະນາຄົດ, ສ່ວນ ເດີໂກນ ນັ້ນຄວາມຈົງຮັກພັກດີຕໍ່ນ້ຳໃຈຮັກຊາດຂອງເພິ່ນ ຊ້ຳພັດພາເພິ່ນເຂົ້າຢູ່ໃນຝ່າຍຂວາທີ່ຮັກສາເດີມ ແລະ ປະຕິການ. ບໍ່ເປັນການບັງເອີນເລີຍ ທີ່ເດີໂກນ ນັກການເມືອງ ແລະ ນັກການທູດຜູ້ສະຫລາດ ຄ່ອງແຄ້ວ ໄດ້ສະແດງໃຫ້ເຫັນເຖິງແນວຄິດແບບຄົນສາຍຕາສັ້ນໆ ຢ່າງໜ້າແປກປະຫລາດ, ໂດຍທຳຄວາມຜິດຢູ່ໃນນະໂຍບາຍຂອງຕົນກ່ຽວກັບອິນດູຈີນ. ສຸດທ້າຍນະໂຍບາຍ ດັ່ງ

ກ່າວໄດ້ພາປະເທດຝະລັ່ງໄປເຖິງການສ່ຽງໄພນອງເລືອດຫລາຍປີຢູ່ຫວຽດນາມອັນທີ່ຈົບລົງດ້ວຍການປະລາໄຊອັນຫນັກຫນ່ວງຂອງພວກລ່າເມືອງຂຶ້ນ, ເຖິງແມ່ນວ່າ ໃນເວລານັ້ນ ເດີໂກນ ບໍ່ໄດ້ກຳອຳນາດອີກແລ້ວກໍ່ຕາມ.

ເຖິງຢ່າງໃດກໍ່ຕາມ ກົງຈັກໂຄສະນາຂອງຍີ່ປຸ່ນ ກໍ່ລົງມືເຄື່ອນໄຫວ ຢ່າງສຽບ-ຂາດ ໂດຍຊອກພູກວິທີຍາດແຍ່ງເອົາການສະຫນັບສະຫນູນຂອງປະຊາຊົນ ຫວຽດນາມກ່ຽວກັບການເຄື່ອນໄຫວຂອງກອງທັບຍີ່ປຸ່ນ. ສື່ມວນຊົນຂອງຍີ່ປຸ່ນໄດ້ປະກາດວ່າ ລັດຖະປະຫານການເມືອງ-ການທະຫານ ໃນວັນທີ ໙ ເດືອນມີນາ ປີ ໑໙໔໕ ນັ້ນແມ່ນແນໃສ່ເພື່ອປົດປ່ອຍຫວຽດນາມອອກຈາກແອກຄວາມອາລັກຂາຂອງພວກລ່າເມືອງຂຶ້ນຝະລັ່ງ . ພາຍຫລັງລັດຖະປະຫານວິທະຍຸກະຈາຍສຽງໂຕກຽວໄດ້ອອກຂ່າວວ່າ: ສິດປົກຄອງອິນດູຈີນຂອງຝະລັ່ງໄດ້ຖືກຍົກເລີກ. ຕອນແລງມື້ດຽວກັນ ອຳນາດປົກຄອງຍີ່ປຸ່ນ ສະເຫນີໃຫ້ເຈົ້າຊີວິດບາວດາຍ ຮ່ວມໄມ້ຮ່ວມມືກັບຍີ່ປຸ່ນ, ແລະ ບາວດາຍ ກໍ່ໄດ້ຮັບເອົາຂໍ້ສະເຫນີດັ່ງກ່າວ.

ເຖິງຢ່າງໃດກໍຕາມ ເຫດການທີ່ເກີດຂຶ້ນແລ້ວ ກໍ່ບໍ່ໄດ້ປ່ຽນແປງສະພາບເປັນປະເທດເມືອງຂຶ້ນຂອງຫວຽດນາມແຕ່ຢ່າງໃດ ຍ້ອນວ່າ ອຳນາດປົກຄອງສູງສຸດ ທັງຫມົດຂອງປະເທດ ນອນຢູ່ໃນກຳມືຂອງຜູ້ບັນຊາການສູງສຸດຍີ່ປຸ່ນ. ສ່ວນບາວດາຍ ພ້ອມດ້ວຍຄະນະລັດຖະບານ ຊຶ່ງແມ່ນຍີ່ປຸ່ນເປັນຜູ້ສ້າງຕັ້ງຂຶ້ນ ແລະ ໂດຍມີເຈີນຈອງກີມ ນັກປະຫວັດສາດເປັນຫົວຫນ້າ ທັງເປັນພະນັກງານເກົ່າ ປະຈຳສຳນັກງານສອດແນມ ພິເສດຂອງຍີ່ປຸ່ນນັ້ນ ພວກເຂົາເຈົ້າເປັນຜູ້ບອກໄດ້ໃຊ້ຟັງຕາມຄຳສັ່ງຂອງຜູ້ບັນຊາການສູງສຸດຍີ່ປຸ່ນ. ວັນທີ ໑໐ ເດືອນມີນາ ມີໂນດາ ຂ້າຫລວງຍີ່ປຸ່ນຢູ່ຈູງກີ້ ໄດ້ເປີດເຜີຍ ແຜນການໂດຍປະກາດວ່າ ນັບແຕ່ນີ້ໄປ ຈູງກີ້ "ບໍ່ພຽງແຕ່ຕັ້ງຢູ່ໃຕ້ການກວດກາເທົ່ານັ້ນ ແຕ່ຫາກຍັງຢູ່ໃຕ້ການປົກຄອງຂອງກອງທັບຍີ່ປຸ່ນ". ສ່ວນຢູ່ໃນເອກະສານທາງການ ແລະ ໃນການໂອ້ລົມນຳກັນ ພວກຍີ່ປຸ່ນຜູ້ຍຶດຄອງລົມໃຫມ່ເອີ້ນອິນດູຈີນວ່າ ເປັນແຂວງ ພົ້ນທະເລແຫ່ງຫນຶ່ງຂອງຍີ່ປຸ່ນ.

ຄຽງຄູ່ກັບການສ້າງສຽງອຶກກະທຶກຄຶກໂຄມຢູ່ອ້ອມຂ້າງ "ເອກະລາດທີ່ ຫວຽດນາມມີໂຊກ ຍາດເອົາມາໄດ້ "ພວກເຂົາກໍ່ດຳເນີນການໂຄສະນາຢ່າງປ່ວງຢ້າກ່ຽວກັບ

"ທ່າໄດ້ປຽບ" ຂອງການເປັນພັນທະມິດກັບປະເທດອາທິດຊູໄທ. ພັກຝ່າຍ ແລະ ອົງການຈັດຕັ້ງທີ່ນິຍົມຍີ່ປຸ່ນຈຳນວນຫລວງຫລາຍ ໄດ້ຖືກສ້າງຕັ້ງຂຶ້ນຢ່າງຣີບຮ້ອນໂດຍຜູ້ຕາງໜ້າຂອງພວກນາຍທຶນຈຳໜ່າຍ, ພວກເຈົ້າທີ່ດິນປະຕິການ ແລະ ພວກເສດສັງຄົມ.

ກອງບັນຊາການທະຫານຍີ່ປຸ່ນ ລອຍຕາມໃຈຫວຽດນາມ ແລະ ອົງການຈັດຕັ້ງຮັກຊາດອື່ນໆ, ເຊິ່ງຖືວ່າລັດຖະປະຫານຄັ້ງວັນທີ ໙ ເດືອນມີນາ ເປັນພຽງແຕ່ ການສັບປ່ຽນປ້າຍເມືອງຂຶ້ນເທົ່ານັ້ນ. ເຮືອບິນຂອງຍີ່ປຸ່ນຖິ້ມໃບປິວ ແລະ ຈົດໝາຍ ລົງເຂດກອງຫລອນຫວຽດບັກ ເພື່ອຮຽກຮ້ອງໃຫ້ຜູ້ນຳ ຫວຽດມິນຮ່ວມໄມ້ຮ່ວມມືກັບຍີ່ປຸ່ນ. ຈົດໝາຍດັ່ງກ່າວຍາມໃດກໍ່ມ້ວນທ້າຍດ້ວຍຂໍ້ຄວາມດັ່ງຕໍ່ໄປນີ້: "ພວກທ່ານຈົ່ງເລືອກ ເອົາໜຶ່ງໃນສອງວິທີທາງຄື ເຫັນດີຮ່ວມມືກັບຍີ່ປຸ່ນ ຫລືຖືກຍີ່ປຸ່ນດັບສູນ..."

ສຸດທ້າຍ ຜູ້ບັນຊາການອັນສູງຂອງພະເຈົ້າຈັກກະພັດຍີ່ປຸ່ນຢູ່ບັກໂບກໍ່ສົ່ງຈົດໝາຍໄປຫາ ໂຮ່ຈີມິນ ໂດຍສ່ວນຕົວ. ໂດຍໃຊ້ຄວາມເວົ້າອັນອ່ອນຫວານ ເຂົາຕັ້ງໃຈດູດດຶງເອົາ ໂຮ່ຈີມິນ ໄປຢູ່ຝ່າຍຍີ່ປຸ່ນ. ເຂົາຂຽນວ່າ: "ສົ່ງເຖິງທ່ານໂຮ່ຈີມິນ ຜູ້ນຳ ຫວຽດມິນ ແລະ ເພື່ອນສະໜິດທີ່ເຄົາລົບນັບຖືຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ຮັບຮູ້ຢ່າງຈິງໃຈວ່າ ທ່ານແມ່ນນັກຮັກຊາດອັນແທ້ຈິງ ແລະ ນັກຣົບຂອງທ່ານ ເປັນຄົນ ອາດຫານຊານໄຊ. ສຳລັບຝ່າຍຂອງທ່ານ ຄວນຮັບຮູ້ວ່າ ຄົນຍີ່ປຸ່ນພວກຂ້າພະເຈົ້າ ໄດ້ຊ່ວຍເຫລືອຫວຽດນາມໂດຍຂັບໄລ່ຝະລັ່ງ ແລະ ມອບເອກະລາດໃຫ້ແກ່ປະເທດຊາດຂອງພວກທ່ານ.

ຍິ່ງໄປກວ່ານັ້ນ, ພວກເຮົາບໍ່ແມ່ນເປັນເພື່ອນບ້ານໃກ້ເຮືອນຄຽງກັນຊັ້ນບໍ?ພວກເຮົາບໍ່ແມ່ນເປັນອ້າຍນ້ອງຮ່ວມເຊື້ອຊາດຜິວເຫລືອງດ້ວຍກັນຊັ້ນບໍ ? ເປັນຫຍັງ ພວກເຮົາຈຶ່ງບໍ່ຮ່ວມມືກັນ ເພື່ອກຽດຕິຍົດຂອງບັນດາຊົນຊາດຂອງພວກເຮົາ ? ບາງທີ ອາດມີສິ່ງໃດໜຶ່ງ ທີ່ແບ່ງແຍກພວກເຮົາ ! ບໍ່ມີດອກ. ມີແຕ່ວ່າພວກເຮົາເຂົ້າໃຈກັນ ຜິດໜ້ອຍດຽວເທົ່ານັ້ນ ເລື່ອງນີ້ພວກເຮົາອາດແກ້ໄຂໄດ້ບໍ່ຍາກ.

ທ່ານບໍ່ຄວນເຊື່ອອາເມລິກາ ແລະ ຈີນ. ປາກເຂົາອົມນ້ຳເຜິ້ງ ແຕ່ໃນເຂົາເຕັມແຕ່ຢາພິດ. ພວກຂ້າພະເຈົ້າຫວັງວ່າ ທ່ານຈະກວດເບິ່ງຄືນນະໂຍບາຍ ຂອງທ່ານແລ້ວເລີ່ມຮ່ວມມືກັນຢ່າງສັນຕິກັບພວກຂ້າພະເຈົ້າ. ພວກຂ້າພະເຈົ້າຕຽມພ້ອມ ຊ່ວຍເຫລືອພວກທ່ານ. ໃນເວລາລໍຄອຍຄຳຕອບ ພວກຂ້າພະເຈົ້າຫວັງວ່າທ່ານ ຈະຮັບເອົາຄວາມຄຳນັບຢ່າງສູງຈາກພວກຂ້າພະເຈົ້າ".

ແຕ່ພວກຍີ່ປຸ່ນກໍບໍ່ສາມາດຮັບເອົາຄຳຕອບອັນເໝາະສົມ ດັ່ງຄວາມປາດຖະໜາຂອງພວກເຂົາຈາກຫວຽດມິນ. ຄຳສັ່ງຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ແລະ ຄະນະກຳມະການໃຫຍ່ຂອງຫວຽດມິນໄດ້ຊີ້ບອກຢ່າງຈະແຈ້ງວ່າ "ບໍ່ຕ້ອງໃຊ້ຄຳເວົ້າແຕ່ຄວນໃຊ້ອາວຸດ ເທົ່ານັ້ນ ເພື່ອຕອບພວກຍີ່ປຸ່ນ".

ກົນອຸບາຍອັນໜ້າໄວ້ຫລັງຫລອກຂອງພວກຊຸນເສິກຍີ່ປຸ່ນ ບໍ່ສາມາດ ຫລອກລວງໃຜໄດ້. ມະຫາຊົນນັບມື້ນັບຮັບຮູ້ວ່າ ຫວຽດນາມໄດ້ກາຍຈາກປະເທດເປັນເມືອງ ຂຶ້ນຂອງຝະລັ່ງ ມາເປັນເມືອງຂຶ້ນຂອງຍີ່ປຸ່ນ, ເຖິງແມ່ນວ່າຖືກພາງຕົວດ້ວຍ"ເອກະລາດ"ອັນປອມແປງກໍຕາມ. ການໃຊ້ອຳນາດເກີນຂອບເຂດທາງດ້ານເສດຖະກິດຂອງພວກ ຍີ່ປຸ່ນ ເຮັດໃຫ້ໝົດທຸກຄົນໂກດເຄືອງທີ່ສຸດ. ການນຳໃຊ້ລະບົບເກັບຊື້ເຂົ້າເປືອກ ເຂົ້າສານ ແລະ ເຄື່ອງບໍລິໂພກອື່ນໆຈາກຊາວນາດ້ວຍການບັງຄັບເພື່ອຕອບສະໜອງຄວາມຕ້ອງການຂອງກອງທັບຍີ່ປຸ່ນ ເຮັດໃຫ້ສະບຽງອາຫານຢູ່ໃນຊົນນະບົດຫວຽດນາມ ຂາດເຂີນຢ່າງໄວວາ ສະນັ້ນຈຶ່ງເປັນເຫດໃຫ້ຊາວນາຕົກຢູ່ໃນສະພາບອຶດເຂົ້າຕາຍ. ຢູ່ຫລາຍບ້ານ ຊາວນາຖືກເກັບເກນແນວເຂົ້າປູກ. ເພື່ອທົດແທນການຂາດເຂີນດ້ານ ການເງິນແບບຊ້ຳເຮື້ອ ກອງບັນຊາການຍີ່ປຸ່ນກຳເອົາສິດຄວບຄຸມທະນາຄານອິນດູຈີນ ແລະບັງຄັບໃຫ້ທະນາຄານພິມເງິນຢ່າງລຽນຕິດ, ໂດຍເຮັດໃຫ້ເງິນເຟີ້ເກີດຂຶ້ນໃນທ້ອງຕະຫລາດ. ໄພອຶດຫິວອາລະວາດຢ່າງໜັກໜ່ວງ ພະຍາດໂລຄາ ໄພເງິນເຟີ້ ໄພຫວ່າງງານ ສະພາບຫລົ້ມຈົມ ທັງໝົດນີ້ແມ່ນສິ່ງໜຶ່ງທີ່ການປົກຄອງຂອງພວກຍີ່ປຸ່ນໄດ້ນຳມາໃຫ້ ຫວຽດນາມ. ໃນຊຸມປີ ໑໙໔໔-໑໙໔໕ ຢູ່ບັກໂບ ແລະ ພາກເໜືອຂອງຈູງໂບ ມີຄົນຕາຍເກືອບສອງລ້ານຄົນ ຍ້ອນອຶດຫິວ ແລະ ພະຍາດຕ່າງໆ. ສະຖານະການຢູ່ໃນປະເທດ, ໂດຍສະເພາະຢູ່ຕົວເມືອງແມ່ນເຕັມໄປດ້ວຍຄົນອຶດຫິວຊຶ່ງຫລູຫລັ່ງມາແຕ່ຊົນນະບົດ, ມັນຄັບຂັນຈົນເຖິງຂັ້ນວ່າພຽງແຕ່ໝັດໄຟໝັດດຽວເທົ່ານັ້ນ ກໍຈະເຮັດໃຫ້ເກີດເປັນໄຟກອງໃຫຍ່ໄດ້.

ໃນຍຸກແຫ່ງຄວາມຍາກໄຮ້ດັ່ງກ່າວ ພັກກອມມູນິດອິນດູຈີນສະແດງຕົວເປັນກຳລັງທີ່ມີການຈັດຕັ້ງທີ່ສຸດ ແລະ ມີຄວາມສາມາດສູ້ຮົບຫລາຍທີ່ສຸດຂອງຂະບວນການຮັກຊາດ. ຕອນຄ່ຳຂອງມື້ທີ່ຍີ່ປຸ່ນເຮັດລັດຖະປະຫານ ກອງປະຊຸມເປີດກວ້າງຂອງຄະນະປະຈຳ ສູນກາງພັກກອມມູນິດອິນດູຈີນ ໄດ້ເປີດຂຶ້ນຢູ່ບ້ານດິງບາງ ຊຶ່ງຕັ້ງຢູ່ຫ່າງຈາກຮ່າໂນ້ຍ ໑໖ ກິໂລແມັດ. ເຖິງວ່າໂຮ່ຈີມິນໄດ້ຮ່ວມກະກຽມກອງປະຊຸມກໍຕາມ ແຕ່ວ່າເພິ່ນກໍຍັງຢູ່ປາກ

ບໍ່ ຈຶ່ງບໍ່ສາມາດມີໜ້າຢູ່ກອງປະຊຸມໄດ້. ຜົນຂອງກອງປະຊຸມແມ່ນການຮັບຮອງເອົາເອກະສານການເມືອງອັນສຳຄັນຄື "ການປະທະກັນລະຫວ່າງຍີ່ປຸ່ນ ກັບຝະລັ່ງ ແລະ ການກະທຳຂອງພວກເຮົາ". ໃນເອກະສານຊີ້ໃຫ້ເຫັນວ່າ ການລັດຖະປະຫານຂອງຍີ່ປຸ່ນໄດ້ສ້າງວິກິດການທາງດ້ານການເມືອງຢ່າງເລິກເຊິ່ງ, ຈາກສິ່ງດັ່ງກ່າວນັ້ນ ຈຶ່ງປະກົດ ມີປະຖົມປັດໄຈພາວະວິໄສ, ເຊິ່ງເຮັດໃຫ້ການລຸກຮືອຂຶ້ນທົ່ວປະເທດ ແລະ ການຍາດເອົາອຳນາດທາງດ້ານການເມືອງໂດຍປະຊາຊົນ ກາຍມາເປັນວຽກອັນດັບໜຶ່ງ ສຳລັບຊ່ວງໄລຍະນັ້ນ. ປະຈຸບັນ "ຝາດຊິດຍີ່ປຸ່ນແມ່ນສັດຕູຕົ້ນຕໍ ສຳລັບປະຊາຊົນອິນດູຈີນ, ຕ້ອງສຸມປາຍຫອກຄຽດແຄ້ນຂອງປະຊາຊົນເຂົ້າໃສ່ພວກເຂົາ. ຂະນະດຽວກັນ ມະຕິກອງປະຊຸມຍັງຊີ້ແຈ້ງຕື່ມອີກວ່າ ຕ້ອງມີສະຕິລະວັງຕົວຕໍ່ພວກຝະລັ່ງ ທີ່ສັງກັດພັກຝ່າຍ ເດີໂກນ, ພວກເຂົາອາດຈະຊອກວິທີຟື້ນຟູອຳນາດການປົກຄອງຂອງຝະລັ່ງ ຢູ່ອິນດູຈີນ.

ຜູ້ທີ່ເຂົ້າຮ່ວມກອງປະຊຸມ ໄດ້ຄົ້ນຄວ້າຄຳແນະນຳ ກ່ຽວກັບວິທີການຈັດຕັ້ງມະຫາຊົນຂອງພັກ ແລະ ຂອງຫວຽດມິນ ໃນໝູ່ປະຊາຊົນໃນສະໄໝກະກຽມລຸກຮືອຂຶ້ນ, ກ່ຽວກັບການສ້າງຕັ້ງຄະນະກຳມະການປົດປ່ອຍ ຢູ່ໃນໂຮງງານ, ບໍ່ຖ່ານຫີນ, ໂຮງຈັກ, ຊົນນະບົດ, ຄ້າຍທະຫານ, ໂຮງຮຽນ, ເວົ້າລວມແລ້ວ ແມ່ນຢູ່ໃນທຸກໆບ່ອນ ທີ່ຫວຽດມິນມີຮາກຖານອັນເຂັ້ມແຂງ. ຄະນະກຳມະການດັ່ງກ່າວມີໜ້າທີ່ປຸກລະດົມມວນໝູ່ ມະຫາຊົນໃຫ້ລຸກຂຶ້ນຍາດແຍ່ງເອົາອຳນາດປົກຄອງ ໃນທັນທີທີ່ໄດ້ຮັບຄຳສັ່ງລຸກຮືອຂຶ້ນ ຫລືເວລາທີ່ໂອກາດອຳນວຍ. ໃນເວລາດຽວກັນ ຄຳແນະນຳຍັງຊີ້ອອກວ່າ ເພື່ອບໍ່ໃຫ້ທະຫານສັດຕູເປັນຝ່າຍບຸກໂຈມຕີກ່ອນ ເລີ່ມແຕ່ບັດນີ້ ຕ້ອງປຸກລະດົມການທຳສົງຄາມກອງຫຼອນຢ່າງກວ້າງຂວາງ ຢູ່ເຂດທີ່ມີປະຖົມປັດໄຈພາວະວິໄສແລ້ວ ໂດຍປົດປ່ອຍເປັນຂັ້ນໆໝົດຈາກເຂດນີ້ລາມໄປຫາເຂດອື່ນ ແລະ ຂະຫຍາຍຖານທີ່ໝັ້ນປະຕິວັດ.

ມະຕິຂອງກອງປະຊຸມຍັງຊີ້ໃຫ້ເຫັນວ່າ ກອງທັບຂອງບັນດາປະເທດຜູ້ເປັນພົນທະມິດຕ້ານຮິດແລນັ້ນ ອາດຈະຍົກພົນຂຶ້ນບົກເທິງອິນດູຈີນ, ເມື່ອເປັນເຊັ່ນນັ້ນ ກໍຈະສ້າງເງື່ອນໄຂສະດວກ ໃຫ້ແກ່ໄຊຊະນະໃນການລຸກຮືອຂຶ້ນທົ່ວປະເທດ. ພ້ອມດຽວກັນມະຕິຍັງເນັ້ນໜັກວ່າ ກ່ອນອື່ນໝົດ ຕ້ອງອີງໃສ່ກຳລັງຂອງຕົນເອງ ແລະ ຄວາມສາມາດຂອງມະຫາຊົນ. ມະຕິຂຽນວ່າ: "ເຖິງຢ່າງໃດກໍຕາມ ພວກເຮົາບໍ່ຄວນຖືການທີ່ທະຫານພົນທະມິດຍົກພົນຂຶ້ນບົກເທິງອິນດູຈີນ ວ່າເປັນເງື່ອນໄຂອັນຈຳເປັນໃຫ້ແກ່ການລຸກຮືອຂຶ້ນ ທົ່ວປະເທດຂອງພວກເຮົາ, ເພາະວ່າອັນນັ້ນ ໝາຍຄວາມວ່າ ອີງໃສ່ຜູ້ອື່ນ ແລ້ວຕົນເອງ

ກໍຈະບໍ່ເຮັດວຽກຫຍັງ ໃນຂະນະທີ່ສະພາບການພວມເອື້ອອຳນວຍໃຫ້".

ໃນວັນເວລາເຊັ່ນດຽວກັນນີ້ ອີງໃສ່ການຂະຫຍາຍຕົວຂອງສະພາບການ ແລະ ຄຳແນະນຳຂອງຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຄະນະບໍລິຫານງານອົງຄະນະພັກເຂດ ກາວ-ບັກ-ລາງ ເລີ່ມປະຕິບັດແຜນການຂະຫຍາຍ ເຂດປົດປ່ອຍທາງດ້ານພື້ນຖານ. ໜ່ວຍໂຄສະນາປະກອບອາວຸດ ໄດ້ຮັບຄຳສັ່ງ ໃຫ້ລົງຈາກພູຜາປ່າດົງ ມາຫາເຂດທົ່ງພຽງ ແລະ ມຸ່ງໜ້າໄປທາງທິດໃຕ້ກ້ຳນະຄອນຫລວງ ຮ່າໂນ້ຍ. ນັບຕັ້ງແຕ່ມື້ທຳອິດ ຂັ້ນຮົບການທະຫານ-ການເມືອງ "ບຸກໜ້າໄປທາງໃຕ້" ກໍໄດ້ຂະຫຍາຍຕົວຢ່າງມີໄຊ. ມາຮອດເດືອນເມສາປີ ໑໙໔໕ ກຳລັງປະຕິວັດ ໄດ້ຄວບຄຸມບໍລິເວນອັນກວ້າງໃຫຍ່ຂອງແຂວງຈຳນວນໜຶ່ງກ້ຳເໜືອຮ່າໂນ້ຍ. ອົງການ ບໍລິຫານຂອງພວກຍີ່ປຸ່ນ ຖືກລົບລ້າງ ອຳນາດປົກຄອງຕົກຢູ່ໃນກຳມືຂອງຄະນະກຳມະການປະຊາຊົນປະຕິວັດ.

ໝ

ໃນຕົ້ນເດືອນພຶດສະພາ ປີ ໑໙໔໕ ກອງເສນາທິການປະຕິວັດໄດ້ອອກ ຈາກແຂວງກາວບັງ, ໄປຕາມຫລັງກອງທັບປົດປ່ອຍທີ່ເຄື່ອນຍ້າຍໄປກ່ອນແລ້ວ. ໂຮ່ຈີ່ມິນ ຂີ່ເຮືອຫາປາລຳນ້ອຍໆ ລ່ອງລົງຕາມກະແສນ້ຳ ແລະ ໄປຂຶ້ນບົກຢູ່ທີ່ບ້ານນ້ອຍ ແຫ່ງໜຶ່ງແຂວງ ຕວຽນກວາງ ຊື່ວ່າບ້ານເຕິນຈາວ.

ຄືກັນກັບເມື່ອຄາວຍັງຢູ່ປາກບໍ່ ໂຮ່ຈີ່ມິນ ພະຍາຍາມດຳລົງຊີວິດແບບດຽວກັບປະຊາຊົນທ້ອງຖິ່ນ. ແຕ່ສອງສາມມື້ຕໍ່ມາ ຢູ່ທີ່ເຕິນຈາວ ປະຊາຊົນກໍ່ພາກັນຊ່າວ່າ: ມີພະນັກງານໃໝ່ ຫາກໍມາຮອດ ອາຍຸກາງຄົນ ຈົ່ງໜວດຍາວ ແສງຕາມີແວວແຫ່ງ ຄວາມສະຫລາດ; ເຊື່ອແນ່ວ່າຕ້ອງແມ່ນຜູ້ນຳ; ທຸກໆຄືນ ບຸກຄົນດັ່ງກ່າວເຮັດວຽກຈົນເດິກດື່ນທ່ຽງຄືນໃຕ້ແສງຕະກຽງ, ຈົນຂ້ອນແຈ້ງຈຶ່ງໄດ້ປັດກວາດເຮືອນມັດເຄື່ອງຂອງ, ຫົດຜັກ, ເກັບມ້ຽນຟືນແຫ້ງ, ປຸກຄົນອື່ນໃຫ້ຕື່ນນອນ...

ຈົນເທົ້າທຸກວັນນີ້ ປະຊາຊົນເຕິນຈາວ ກໍຍັງຈົດຈຳເລື່ອງອັນຈັບໃຈທີ່ໄດ້ເກີດຂຶ້ນໃນມື້ທຳອິດ ທີ່ໂຮ່ຈີ່ມິນ ມາຮອດບ້ານເຂົາເຈົ້າ. ທະຫານປົດປ່ອຍກອງຮ້ອຍໜຶ່ງ ໄດ້

ມາພັກເຊົ່າຄາວຢູ່ໃນເຮືອນຫລັງໜຶ່ງ, ມື້ໜຶ່ງ ໂຮ່ຈີມິນ ໄດ້ມາຢ້ຽມຢາມ ຖາມຂ່າວ ສຸກທຸກ ແລະ ໄດ້ເຫັນວ່າບ່ອນກິນ, ບ່ອນນອນບໍ່ເປັນລະບຽບປານໃດ. ເພິ່ນເວົ້ານຳຜູ້ ບັນຊາການດ້ວຍຄວາມບໍ່ພໍໃຈ. ຜູ້ບັນຊາການບໍ່ຮູ້ຈັກໂຮ່ຈີມິນ ວ່າແມ່ນໃຜ ຍ້ອນວ່າເຂົາ ເປັນຄົນໃຈຮ້ອນ, ເມື່ອໄດ້ຍິນຄຳເວົ້າແນວນັ້ນ ເຂົາກໍ່ຕັດຄວາມເວົ້າຂອງເພິ່ນວ່າ:

"ເຈົ້າແມ່ນໃຜ ? ເປັນຫຍັງຈຶ່ງຕຳໜິພວກຂ້ອຍ ? ຖ້າວ່າຈຳເປັນກໍ່ແມ່ນໜ້າ ທີ່ຂອງຂັ້ນເທິງພຸ້ນ".

ໂຮ່ຈີມິນ ກໍຍັງຕອບຢ່າງທຸ່ມທ່ຽງວ່າ:

"ຫວານເປັນລົມ ຂົມເປັນຢາ ຂ້ອຍແມ່ນປະຊາຊົນທຳມະດາຄົນໜຶ່ງ, ແຕ່ຂ້ອຍ ກໍມີສິດອອກຄຳເຫັນໄດ້ຄືກັນ ກອງທັບປົດປ່ອຍ ແມ່ນກອງທັບ ທີ່ຖືກກຳເນີດມາຈາກປະຊາ ຊົນ ແລະ ເພື່ອປະຊາຊົນ, ບໍ່ແມ່ນຊັ້ນຫວະ ?"

ຜູ້ບັນຊາການບໍ່ຮູ້ວ່າ ຈະຕອບແນວໃດ. ມື້ລູນມາ ເມື່ອພົບເພື່ອນຄົນທີ່ເປັນ ຜູ້ ໜຶ່ງຢູ່ໃນໜ່ວຍປ້ອງກັນໂຮ່ຈີມິນ ລາວຈຶ່ງຈົ່ມໃຫ້ເຂົາຟັງວ່າ:

"ມີພໍ່ເຖົ້າຄົນໜຶ່ງບໍ່ຮູ້ວ່າມາຈາກຕາແສງຫຍັງ, ເວົ້າເກັ່ງໆ ເພິ່ນຮ້າຍໃຫ້ຂ້ອຍ ແຕ່ຂ້ອຍບໍ່ໄດ້ຖຽງຄວາມເພິ່ນ".

ຜູ້ເປັນເພື່ອນຫົວ ແລະ ຊົມຄ່ອຍໆໃສ່ຫູລາວວ່າ:

"ໂອຍ! ເພື່ອນເອີຍ, ພໍ່ເຖົ້າຄົນນັ້ນແທ້ຈິງແລ້ວ ແມ່ນຜູ້ນຳຂະບວນການປະຕິ- ວັດເຮົາໃນປະຈຸບັນໄດ໋".

ພາຍຫລັງທີ່ໂຮ່ຈີມິນ ແລະ ຄະນະປະຈຳຄະນະບໍລິຫານງານສູນກາງພັກຍົກຍ້າຍ ໄປຢູ່ເຕີນຈາວ ບ້ານນ້ອຍແຫ່ງນີ້ ເລີຍກາຍເປັນໃຈກາງຂອງການປະຕິວັດ ທີ່ກຳລັງ ຈະລະເບີດຂຶ້ນ ທັງເປັນໃຈກາງຂອງປະເທດຫວຽດນາມໃໝ່ ທີ່ກຳລັງຈະກຳເນີດຂຶ້ນ. ຈາກບ່ອນນີ້ ຜູ້ຕິດຕໍ່ຂອງພັກນຳເອົາຄຳຊີ້ນຳ ແລະ ຄຳແນະນຳຕ່າງໆ ໄປແຈກຢາຍ ຢູ່ ທົ່ວປະເທດ, ໃນເອກະສານເຫລົ່ານັ້ນໄດ້ຊີ້ໃຫ້ເຫັນວ່າ ຈຳເປັນຕ້ອງເລັ່ງລັດ ກະກຽມ ການລຸກຮືຂຶ້ນປະກອບອາວຸດໃນທົ່ວປະເທດ. ຊາວໜຸ່ມຜູ້ຮັກຊາດຫລັ່ງໄຫລ ຈາກທົ່ວປະ ເທດມາບ່ອນນີ້ ເພື່ອເຕົ້າໂຮມກັນຢູ່ໃຕ້ລົມທຸງປະຕິວັດ. ດ້ວຍຄວາມສະໝັກໃຈ ເຂົາ ເຈົ້າໜີຈາກບ້ານເກີດ ໂຮງຈັກ ໂຮງຮຽນ ແລະ ເລັດລອດຂຶ້ນໄປພາກເໜືອຊອກຄົ້ນ

ຫາຫວຽດມິນ, ກອງທັບປົດປ່ອຍ, ພັກກອມມູນິດ. ເສັ້ນທາງອັນຄັບແຄບ ແລະ ທາງຍ່າງລອດໄປຕາມປ່າ ທີ່ພາໄປຮອດບ້ານເຕິນຈາວ ນັບວັນນັບມີຄົນຫຽວໄປຫຽວມາຫຼາຍກວ່າເກົ່າ ຄືຈັ່ງວ່າຢູ່ແຫ່ງນີ້ກຳລັງມີປາງບຸນອັນໃຫຍ່ໂຕ.

ຜ່ານຈາກບົດຮຽນຂອງຕົນເອງ ປະຊາຊົນເຕິນຈາວ ແລະ ເຂດປົດປ່ອຍ ເຊື່ອແນ່ວ່າ ການປະຕິວັດ ຈະນຳເອົາສິດຜົນປະໂຫຍດຢ່າງຫລວງຫລາຍທີ່ສຸດ ມາໃຫ້ປະຊາຊົນທຳມະດາສາມັນ. ຢູ່ແຫ່ງນີ້ ພວກເຂົາໄດ້ລົງມືປະຕິບັດສິດໃນການເລືອກຕັ້ງທົ່ວໄປ, ປ່ອນບັດເອົາສະພາປະຊາຊົນ, ເປີດຊຸດຮຽນລົບລ້າງໄພກືກໜັງສື, ແມ່ຍິງມີສິດ ສະເໝີພາບເທົ່າກັບຜູ້ຊາຍ, ລົບລ້າງການເສຍພາສີທີ່ໄຮ້ສາລະ ແລະ ອັບອາຍຂາຍໜ້າຊຶ່ງພວກລ່າເມືອງຂຶ້ນນຳມາໃຊ້ເພື່ອຂູດຮີດປະຊາຊົນ. ປະຊາຊົນເຂດປົດປ່ອຍຕ້ອນຮັບຊີວິດໃໝ່ ດ້ວຍຄວາມຟົດຟື້ນ ແລະ ເບີກບານມ່ວນຊື່ນ, ມີຄົນຈຳນວນຫລວງຫລາຍ ສະໝັກໃຈເຂົ້າຮ່ວມຖັນແຖວທະຫານປົດປ່ອຍ, ສະໝັກໃຈຮັກສາຄວາມເປັນລະບຽບຮຽບຮ້ອຍ, ສະໝັກເປັນຄົນພາທາງ, ສະໜອງສະບຽງອາຫານໃຫ້ນັກຮົບ ແລະ ພະນັກງານພັກ.

ວັນທີ ໔ ເດືອນມິຖຸນາ, ກອງປະຊຸມໃຫຍ່ຜູ້ແທນປະຊາຊົນຫວຽດນາມ ພາກເໜືອ ໄດ້ທຳພິທີເປີດຂຶ້ນຢູ່ ເຕິນຈາວ ຕາມຫົວຄິດລິເລີ່ມຂອງ ໂຮ່ຈິມິນ. ໂຮ່ຈິມິນ ສະເໜີຕໍ່ທີ່ປະຊຸມໃຫ້ສ້າງຕັ້ງເຂດປົດປ່ອຍເອກະພາບ ຊຶ່ງປະກອບດ້ວຍຫົກແຂວງ ທີ່ໄດ້ຖືກປົດປ່ອຍຢ່າງສິ້ນເຊີງແລ້ວ ແລະ ພາກສ່ວນໜຶ່ງຂອງສອງແຂວງທີ່ຕິດຈອດກັບ ນະຄອນຫລວງຮ່າໂນ້ຍ, ຫັນປ່ຽນເຂດປົດປ່ອຍໃຫ້ກາຍເປັນຖານທີ່ໝັ້ນຕົ້ນຕໍ ໃນການຕໍ່ສູ້ ເພື່ອໂຄ່ນລົ້ມອຳນາດປົກຄອງຂອງພວກຍີ່ປຸ່ນຜູ້ຮຸກຮານແລະ ລັດຖະບານຫຸ່ນບາວດາຍ. ບ້ານເຕິນຈາວ ໄດ້ຖືກເລືອກເປັນສູນກາງບໍລິຫານຂອງເຂດປົດປ່ອຍເອກະພາບ ຊຶ່ງມີປະຊາຊົນຫລາຍກວ່າໜຶ່ງລ້ານຄົນ.

ດັ່ງນັ້ນ ປະເທດຫວຽດນາມໃໝ່ທີ່ມີເອກະລາດຈຶ່ງໄດ້ກຳເນີດຂຶ້ນ, ໂດຍຢູ່ພາຍໃຕ້ການຄວບຄຸມຂອງຫວຽດມິນ ແລະ ບໍ່ຂຶ້ນກັບອຳນາດປົກຄອງຍີ່ປຸ່ນ-ບາວດາຍ, ເຂດປົດປ່ອຍດັ່ງກ່າວ ຕັ້ງຫ່າງຈາກສຳນັກງານຂອງຜູ້ບັນຊາການກອງທັບຍີ່ປຸ່ນຜູ້ຍຶດຄອງ ຕັ້ງຫລາຍສິບກິໂລແມັດ. ຄະນະກຳມະການປົກຄອງປະຊາຊົນປະຕິວັດ ໄດ້ຖືກສ້າງຕັ້ງຂຶ້ນຢູ່ທຸກແຫ່ງໃນເຂດປົດປ່ອຍ ແລະ ທັງໄດ້ປະຕິບັດໂຄງການການເມືອງຂອງຫວຽດມິນຢ່າງຕັ້ງໜ້າ. ຄວາມພະຍາຍາມຈຳນວນໜຶ່ງຂອງພວກຍີ່ປຸ່ນ ທີ່ຫວັງຢາກຈະນຳໃຊ້ກອງທະ

ທານຫລວງເພື່ອດັບມອດອຳນາດປົກຄອງປະຊາຊົນປະຕິວັດ ໃນເຂດປົດປ່ອຍດ້ວຍໃຊ້ກຳລັງອາວຸດ ບໍ່ໄດ້ນຳຜົນຫຍັງມາສູ່ພວກເຂົາ.

ໃນວັນເວລາດັ່ງກ່າວ ໂຮຈິມິນ ໄປເຮັດວຽກຢູ່ທຸກຫົນທຸກແຫ່ງເພື່ອໃຫ້ຄຳຊີ້ນຳ, ເຊັນຄຳສັ່ງ ແລະ ຄຳແນະນຳ, ບັນຊາກອງປະຊຸມ, ກຳແໜ້ນທຸກໆບັນຫາ ກະກຽມການລຸກຮື້ອນດ້ວຍອາວຸດ. ເພິ່ນມັກເວົ້າຢ້ຳຄືນເລື້ອຍໆວ່າ: "ທຸກສິ່ງທຸກຢ່າງ ຂຶ້ນກັບພະນັກງານ!" ແລະ ຮຽກຮ້ອງໃຫ້ທຳການຕິດຕໍ່ອັນຮັບປະກັນກັບກຳມະການຄະນະ ບໍລິຫານງານສູນກາງພັກ ແລະ ທີວັກຫລັກແຫລ່ງຂອງພັກ ຢູ່ຕາມເຂດທົ່ງພຽງ ເພື່ອປະສານສົມທົບການເຄື່ອນໄຫວ ແລະ ເພື່ອກຳສະພາບການທີ່ເກີດຂຶ້ນຢູ່ນະຄອນຫລວງແລະຢູ່ຕົວເມືອງໃຫຍ່ໆໃຫ້ໄດ້. ເຖິງວ່າໂຮຈິມິນ ມີວຽກຮີບດ່ວນຫລາຍແນວກໍຕາມ ເພິ່ນ ກໍຍັງຍາດແຍ່ງເວລາສຳລັບອ່ານປຶ້ມການເມືອງ ຂຽນບົດຄວາມ ແລະ ຕ້ອນຮັບແຂກ.ນັບວັນນັບມີຫລາຍຄົນຍ່າງມາທີ່ເຕີນຈາວ, ພິເສດແມ່ນຜູ້ແທນຊົນຊາດສ່ວນໜ້ອຍຄື: ເມືອງ ໂທ,ນຸງ,ໄທ, ຢາວ...ພວກເຂົາເຈົ້າກໍຢາກຊອກຮູ້ເຫດການທີ່ກຳລັງເກີດຂຶ້ນ ແລະ ຢາກເຂົ້າຮ່ວມໃນເຫດການດັ່ງກ່າວ. ຫລັງຈາກເວົ້າຈາພາທີກັບໂຮຈິມິນ ແລ້ວເຂົາເຈົ້າສະແດງຄວາມນິຍົມຊົມຊອບທີ່ສຸດວ່າ:

"ນີ້ແຫລະຈິ່ງແມ່ນຄົນແທ້ຄົນວ່າ ! ເບິ່ງຄືວ່າແມ່ນຊາວນາທຳມະດາ ແຕ່ຊຳພັດມີຄວາມສະຫລາດຫລັກແຫລມ ແລະ ອ່ອນນ້ອມອີຫລີ. ປະຊາຊົນຫວຽດນາມຕ້ອງວ່າ ມີພອນສະຫວັນແທ້ໆ! ມີຄົນປະເພດນີ້ ເດັດຂາດວ່າຫວຽດມິນຈະຕີພ່າຍແພ້ສັດຕູ... " ແລ້ວເຂົາເຈົ້າກໍໄດ້ອອກເດີນທາງກັບຄືນບ້ານ ໂດຍເລົ່າເລື່ອງດັ່ງກ່າວສູ່ປະຊາຊົນຟັງຢູ່ຕາມໝູ່ບ້ານທີ່ຫ່າງໄກ ຊຶ່ງກຳລັງຄອງຄອຍຜູ້ແທນຂອງຕົນດ້ວຍຄວາມຮ້ອນຮົນ.

ທ່າມກາງວຽກງານອັນຫຍຸ້ງຍາກສັບສົນ, ໂຮຈິມິນຊຳພັດເປັນໄຂ້ໜັກ ຢ່າງກະທັນຫັນ.ສະຫາຍ ຫວໍຫງວຽນຢາບ ຫວນຄືນເຖິງວັນແຫ່ງຄວາມທຸກທໍລະມານດັ່ງກ່າວດັ່ງຕໍ່ໄປນີ້: ຫລາຍມື້ລຽນຕິດລຸງໂຮເປັນໄຂ້ຮ້ອນ, ເຖິງຢ່າງໃດກໍຕາມ ລຸງຍັງຝືນໃຈເຮັດວຽກ. ແຕ່ລະຄັ້ງທີ່ຂ້າພະເຈົ້າໄປຖາມຂ່າວສຸກທຸກ ເພິ່ນໄດ້ແຕ່ເວົ້າວ່າ: "ເຮັດວຽກໂລດ, ລຸງບໍ່ເປັນຫຍັງດອກ".

ແຕ່ຂ້າພະເຈົ້າສັງເກດເຫັນວ່າ ລຸງອ່ອນເພຍຫລາຍ, ຕົນໂຕຈ່ອຍຜອມຫລາຍ. ວັນໜຶ່ງຂ້າພະເຈົ້າໄດ້ເຂົ້າໄປບ່ອນພັກຂອງເພິ່ນ, ລຸງກຳລັງໄຂ້ຂຶ້ນສູງ ນອນກະສັບກະສ່າຍ, ໄຫລປາກ. ຢູ່ກຢາທານັ່ງກໍອິດທີ່ສຸດ ລຸງກິນຢາກິນິນຈຳນວນໜຶ່ງ ແຕ່ບໍ່ເຫັນວ່າ

ດີຂຶ້ນ. ຕາມທຳມະດາແລ້ວ ເມື່ອລຸງເຮັດວຽກ ລຸງເກືອບບໍ່ພັກຜ່ອນເລີຍ ແຕ່ບັດນີ້ ລຸງລຸກບໍ່ຂຶ້ນ.

ສອງສາມມື້ ໂຮ່ຈິມິນ ຕົກຢູ່ໃນສະພາບອັນຕະລາຍ, ຢູ່ລະຫວ່າງຄວາມເປັນກັບຄວາມຕາຍ. ຢູ່ຕົ້ນຈາວກໍ່ມີຫລາຍຄົນຮູ້ຈັກດີກ່ຽວກັບຢາພື້ນເມືອງ. ຕາມທາງສັດປ່າ–ຫຽວ ເຂົາເຈົ້າເຂົ້າປ່າເລິກ ຊອກຫາຮາກຢາແລ້ວເອົາມາໃຫ້ "ສະຫາຍເຖົ້າ" ຊຶ່ງທຸກຄົນເຄົາລົບນັບຖື ມີນາຍພານຜູ້ໜຶ່ງເຖົ້າແກ່ແລ້ວ ຜົມກໍຫງອກເປັນດອກເລົາ ລາວມູດລົງພື້ນນ້ຳຈັບເອົາເຕົ່າໄດ້ໜຶ່ງໂຕ ຊຶ່ງມັນມີອອງງາມທີ່ສຸດ, ບັດແລ້ວເຖົ້ານາຍພານກໍກັບຄືນມາທີ່ຕູບພ້ອມດ້ວຍເຕົ່າ, ປາດເອົາເລືອດມັນຈົນເຕັມຖ້ວຍໜຶ່ງໃບ, ແລ້ວເອົາເລືອດມາປົນກັບເຫລົ້າ ຈາກນັ້ນກໍບັງຄັບໃຫ້ຄົນເຈັບດື່ມ. ບໍ່ອາດຮູ້ໄດ້ວ່າ ຢາປະເພດດັ່ງກ່າວມີຜົນສັກສິດຫລືບໍ່ ແຕ່ນີ້ລຸນມາ ອາການກໍ່ອາວດີຂຶ້ນແດ່ ໂຮ່ຈິມິນ ຮູ້ສຶກ ສົດຊື່ນ ແລະ ສຸຂະພາບກໍຟື້ນຄືນຢ່າງໄວວາ.

ເລີ່ມແຕ່ຕົ້ນເດືອນກໍລະກົດ ໂຮ່ຈິມິນ ແລະ ຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຕົກລົງໂຮມກອງປະຊຸມໃຫຍ່ ຫລືກອງປະຊຸມພັກຂຶ້ນຢູ່ ຕົ້ນຈາວ, ແລະ ຕໍ່ຈາກນັ້ນແມ່ນກອງປະຊຸມຜູ້ແທນຫວຽດມິນ ເພື່ອພານມະຕິກ່ຽວກັບກຳນົດເວລາດຳເນີນການລຸກຮື້ຂຶ້ນປະກອບອາວຸດໃນທົ່ວປະເທດ. ນັກຕິດຕໍ່ຖືກສົ່ງໄປໃນທົ່ວທຸກແຫ່ງຂອງປະເທດ ເຊັ່ນດຽວກັນກັບຢູ່ໃນພາກໃຕ້ຈີນ ໂດຍມີຄຳສັ່ງໃຫ້ຜູ້ແທນຜູ້ມີອຳນາດເຕັມຂອງພັກ ແລະ ຂອງຫວຽດມິນ ມາຮອດ ຕົ້ນຈາວ ໄວເທົ່າໃດຍິ່ງດີ. ແຕ່ວ່າການກະກຽມກອງປະຊຸມໃຫຍ່ ກໍໄດ້ແກ່ຍາວເກີນຄວາມຄາດຄະເນ. ບັນດາຜູ້ແທນທີ່ມາຮ່ວມຊັກຊ້າ ຍ້ອນວ່າຕ້ອງໄດ້ຍ່າງມາຈາກເຂດທາງໄກຍ່າງທາງໂຄ້ງ ເພື່ອຫລີກ ປ້ອມຍາມຂອງທະຫານຍີ່ປຸ່ນ.

ເຖິງຢ່າງໃດກໍຕາມ ວັນເວລາກໍບໍ່ລໍຖ້າໃຜ. ເຫດການກໍເກີດຂຶ້ນຢ່າງໄວວາ . ໄຊຊະນະຂອງປະຊາຊົນໂຊວຽດ ໃນມະຫາສົງຄາມປ້ອງກັນປິຕຸພູມ, ການປະລາໄຊຂອງລັດທິຟາດຊິດທາງດ້ານການທະຫານ, ການເມືອງ ແລະ ຈິດໃຈຢ່າງສິ້ນເຊີງ ເຮັດໃຫ້ທັງຈັງຂອງລັດທິລ່າເມືອງຂຶ້ນ ແລະ ລັດທິຈັກກະພັດໂລກ ອ່ອນແຮງລົງຢ່າງກະທັນຫັນ . ວັນທີ ໘ ເດືອນສິງຫາ ປີ ໑໙໔໕ ສະຫະພາບໂຊວຽດປະກາດສົງຄາມກັບຍີ່ປຸ່ນ ແລ້ວ

ກອງທັບໂຊວຽດກໍ່ເຄື່ອນທັບບຸກໂຈມຕີຂັ້ນຕັດສິນ ກອງທະຫານກວານຕຶງ ຊັ້ນຍອດຂອງຍີ່ປຸ່ນຢູ່ມັງຈູຣີ. ຕອນເຊົ້າວັນທີ ໑໐ ເດືອນສິງຫາ ໃນການປະຊຸມຮ່ວມກັນ ໂດຍການເຂົ້າຮ່ວມຂອງເຈົ້າຈັກກະພັດຍີ່ປຸ່ນ ຮິໂຣຮີໂຕະ ຄະນະລັດຖະບານ ແລະ ສະພາ ການທະຫານຍີ່ປຸ່ນ ຕັດສິນໃຈຍອມຈຳນົນ. ໃນວັນດຽວກັນມີຂ່າວວ່າ ຍີ່ປຸ່ນຮັບຮູ້ສົນທິ ສັນຍາປົດສະດາມ. ອຳນາດປົກຄອງຂອງຍີ່ປຸ່ນຜູ້ຍຶດຄອງຢູ່ອິນດູຈີນ ໄດ້ຕົກຢູ່ໃນອາການຊັອກ . ດັ່ງນັ້ນ ສະພາວະການປະຕິວັດຈຶ່ງກໍ່ຕົວຂຶ້ນ ໃນເມື່ອທຸກໆປະຖົມປັດໃຈອັດຕະວິໄສ ແລະ ພາວະວິໄສອັນຈຳເປັນໄດ້ສຸກງອມແລ້ວ ສຳລັບໄຊຊະນະຂອງການປະຕິວັດ. ຊາວກອມມູນິດຫວຽດນາມ ໄດ້ສະແດງໃຫ້ເຫັນຄວາມຕື່ນຕົວດ້ານການເມືອງ ແລະ ຄວາມເຂົ້າ–ໃຈຢ່າງເລິກເຊິ່ງກ່ຽວກັບຍຸດທະສາດ ແລະ ຍຸດໂທບາຍປະຕິວັດ, ພວກເຂົາ ໄດ້ໝູນໃຊ້ສະພາບອຳນວຍດັ່ງກ່າວຢ່າງມີພິບໄຫວ.

ຄະນະປະຈຳຄະນະບໍລິຫານງານສູນກາງພັກ ຕົກລົງຮຽກໂຮມກອງປະຊຸມ ແຫ່ງຊາດຂອງພັກຢ່າງຮີບດ່ວນ ເຖິງວ່າຍັງມີຜູ້ແທນຈຳນວນໜຶ່ງ ທີ່ກຳລັງຢູ່ໃນໄລຍະ ເດີນທາງມາຮ່ວມປະຊຸມກໍຕາມ. ເຖິງວ່າຍັງບໍ່ທັນເຊົາເຈັບເປັນປົກກະຕິເທື່ອ ຫລັງຈາກ ທີ່ເປັນໄຂ້ໜັກ ແຕ່ໂຮ່ຈີມິນ ກໍຍັງສູ້ຊົນເຂົ້າຮ່ວມຢ່າງຕັ້ງໜ້າໃນວຽກງານກະກຽມ. ວັນທີ ໑໓ ເດືອນສິງຫາ ຢູ່ເຕີນຈາວ ກອງປະຊຸມແຫ່ງຊາດຂອງພັກ ໄດ້ເປີດຂຶ້ນຢູ່ກ້ອງຮົ່ມໂພໃຫຍ່ອັນເຢັນດີ.

ໃນຂະນະທີ່ກອງປະຊຸມດຳເນີນວຽກງານຢ່າງຟົດຟື້ນຢູ່ນັ້ນ ພັດມີຜູ້ຕິດຕໍ່ ຄົນໜຶ່ງ ປະກົດຕົວໃນທັນທີທັນໃດ ລາວທັງຫາຍໃຈຫອບ ທັງລາຍງານຂ່າວທີ່ທຸກຄົນຄອງຄອຍ ວ່າ ລັດຖະບານຍີ່ປຸ່ນປະກາດຍອມຈຳນົນໂດຍບໍ່ມີເງື່ອນໄຂ. ຄວາມຍິນດີມີຫລາຍຈົນຫາ ອັນປຽບບໍ່ໄດ້: ສຽງຕົບມື, ສຽງຮ້ອງໂຮດັງກ້ອງກັງວານ, ທຸກຄົນກອດກັນ, ຍິ້ມຫົວຢ່າງເບີກບານ. ທຸກຄົນລ້ວນແຕ່ເຂົ້າໃຈວ່າ ນັ້ນແມ່ນໝາຍເຖິງວາລະສຸດທ້າຍ ຂອງຄວາມຄອງຄອຍ ແລະ ການລັ່ງເລໄດ້ມາຮອດແລ້ວ, ວັນເວລາດຳເນີນງານອັນເດັດດ່ຽວໄດ້ມາເຖິງ; ຢູ່ຕໍ່ໜ້າບໍ່ມີເສັ້ນທາງໃດອື່ນ ນອກຈາກເສັ້ນທາງດຽວ ເຊິ່ງໄດ້ແກ່ ການລຸກຮືຂຶ້ນປະກອບອາວຸດ ໃນລະດັບທົ່ວປະເທດ, ການຍາດເອົາອຳນາດໂດຍປະຊາຊົນ, ການປົດປ່ອຍຊາດ ທີ່ຄອງຄອຍມາດົນນານ ອອກຈາກແອກກົດຂີ່ຂອງຕ່າງປະເທດ.

ກອງປະຊຸມໄດ້ຜ່ານມະຕິລົງປະຫວັດສາດ ກ່ຽວກັບການປຸກລະດົມການລຸກຮືຂຶ້ນ, ແນໃສ່ໂຄ່ນລົ້ມອຳນາດປົກຄອງຂອງພວກຍີ່ປຸ່ນຜູ້ຍຶດຄອງ ແລະ ພວກລູກແຫລ້ງຕີນມືຂອງ

ພວກເຂົາ; ກ່ຽວກັບການສ້າງຕັ້ງປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ພາຍຫລັງທີ່ການປະຕິວັດໄດ້ຮັບໄຊຊະນະ. ນອກຈາກນັ້ນ ກອງປະຊຸມຍັງໄດ້ກຳນົດແນວທາງຍຸດໂທບາຍຂອງພັກ ສຳລັບໄລຍະປະຈຸບັນຂອງການປະຕິວັດ. ທີ່ປະຊຸມຍັງພິຈາລະນາ ແລະ ເຫັນດີນຳ ສ່ວນປະກອບຂອງຄະນະກຳມະການລຸກຮືຂຶ້ນ. ເຖິງແມ່ນວ່າກອງປະຊຸມຍັງບໍ່ທັນປິດລົງກໍຕາມ, ແຕ່ຜູ້ແທນຂອງບາງເຂດ ທີ່ຢູ່ຫ່າງໄກທີ່ສຸດ ກໍໄດ້ຮັບອະນຸຍາດໃຫ້ເດີນທາງອອກຈາກເຕີນຈາວກ່ອນໝູ່ ແລະ ຮີບຮ້ອນນຳເອົາຄຳສັ່ງລຸກຮືຂຶ້ນກັບຄືນໄປທ້ອງຖິ່ນໃຫ້ທັນກັບເວລາ ເພື່ອນຳພາ ແລະ ດຳເນີນການລຸກຮືຂຶ້ນໂດຍກົງ. ຜູ້ຕິດຕໍ່ຖືກສົ່ງໄປຫລາຍທິດຕ່າງກັນ ເພື່ອເຮັດໜ້າທີ່ເປັນຜູ້ແຈ້ງຂ່າວມະຕິຂອງກອງປະຊຸມກ່ຽວກັບການລຸກຮືຂຶ້ນ ໃຫ້ຜູ້ແທນຊຶ່ງຍັງຢູ່ໃນລະຫວ່າງເດີນທາງມາ ເຕີນຈາວ ແລະສົ່ງຕໍ່ໃຫ້ເຂົາເຈົ້າຮີບຮ້ອນກັບຄືນທ້ອງຖິ່ນຂອງຕົນ.

ຜູ້ເຂົ້າຮ່ວມກອງປະຊຸມເອົາໃຈໃສ່ເປັນພິເສດ ຕໍ່ບັນຫາຕ້ອງຮັບປະກັນໃຫ້ມີການເຄື່ອນໄຫວຢ່າງວ່ອງໄວ ແລະ ທັນກັບເວລາ ໃນການຍາດເອົາອຳນາດຢູ່ສູນກາງ ກໍຄືຢູ່ທ້ອງຖິ່ນ. ບັນຫາມັນມີຢູ່ບ່ອນວ່າ ກອງທັບອັງກິດ ກັບອາເມລິກາເປັນຝ່າຍທີ່ມີໜ້າທີ່ຈະປົດອາວຸດກອງທັບຍີ່ປຸ່ນ ທີ່ປະລາໄຊຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້ ແລະຢູ່ຕາມຫລັງຂອງພວກດັ່ງກ່າວ ມີກອງທັບລ່າເມືອງຂຶ້ນຂອງຝະລັ່ງ ທີ່ເປັນນາຍເກົ່າຂອງ ອິນດູຈີນ, ພວກຝະລັ່ງ ຊອກຫາວິທີຟື້ນຟູແອກຄອບຄອງທີ່ພວກເຂົາໄດ້ສູນເສຍໄປນັ້ນ ໃຫ້ກັບຄືນອີກ. ສະນັ້ນ ນັກຮັກຊາດຫວຽດນາມ ຈຶ່ງພົບກັບບັນຫາອັນຫຍຸ້ງຍາກທີ່ສຸດຄືຍາດເອົາອຳນາດຈາກມືຂອງກອງທັບຍີ່ປຸ່ນ ແລະ ລູກແຫລ້ງຕີນມືຂອງພວກເຂົາ ກ່ອນທີ່ ກອງທັບພັນທະມິດຈະມາຮອດ ເພື່ອທີ່ຈະຕ້ອນຮັບກອງທັບພັນທະມິດໃນຖານະທີ່ຕົນເປັນເຈົ້າຂອງຜູ້ມີອຳນາດເຕັມຂອງປະເທດຫວຽດນາມ.

ຖັດຈາກກອງປະຊຸມແຫ່ງຊາດຂອງພັກ ໃນວັນທີ ໑໖ ເດືອນສິງຫາ ກອງປະຊຸມໃຫຍ່ແຫ່ງຊາດຂອງບັນດາຜູ້ແທນປະຊາຊົນກໍ່ໄດ້ຖືກເປີດຂຶ້ນຢູ່ ເຕີນຈາວ, ກອງປະຊຸມໃຫຍ່ເຊິ່ງແມ່ນຄະນະກຳມະການໃຫຍ່ຫວຽດມິນເປັນຜູ້ຮຽກໂຮມປະຊຸມຄັ້ງນັ້ນ ມີຜູ້ແທນ ໖໐ ຄົນຂອງທັງສາມພາກຂອງຫວຽດນາມເຂົ້າຮ່ວມຄື ບັກກີ່, ຈຸງກີ່, ນາມກີ່ ນັບທັງຜູ້ຕາງໜ້າຈາກອົງການຈັດຕັ້ງຄົນຫວຽດນາມທີ່ອົບພະຍົບໄປຢູ່ຕ່າງປະເທດ. ໂຮຈິມິນນັ່ງຢູ່ກາງຄະນະປະທານ. ເປັນຄັ້ງທຳອິດທີ່ຜູ້ແທນຫລາຍຄົນໄດ້ເຫັນໜ້າພໍ້ຕາເພິ່ນ ສະນັ້ນ ເຂົາເຈົ້າຈຶ່ງຖາມກັນຢູ່ເລື້ອຍໆວ່າ ພໍ່ເຖົ້າທີ່ໜ້ານັບຖື ມີໃບໜ້າຫລາເຫລືອງອິດເມື່ອຍ

ຜົມຫງອກ, ໜວດຫງອກ, ໜ້າຜາກສູງ ແຕ່ດວງຕາທັງຄູ່ໃສແຈ້ງພິດປົກກະຕິດັ່ງກ່າວນັ້ນ ແມ່ນໃຜ ? ແຕ່ວ່າເມື່ອໂຮ່ຈິມິນ ລຸກຂຶ້ນປະກາດເປີດກອງປະຊຸມໃຫຍ່ ສຽງກະຊິບວ່າ: "ແທ້ຈິງແລ້ວ ແມ່ນຫງວຽນອາຍກວັກ ນັ້ນເອງ!" ດັງຕໍ່ໆກັນເປັນທອດໆປານກັບກັບກະແສຄື້ນທີ່ກະຈາຍໄປທົ່ວຫ້ອງປະຊຸມ, ການປະກົດຕົວຂອງເພິ່ນຢູ່ເທິງເວທີໄດ້ກໍ່ໃຫ້ເກີດມີສຽງຕົບມືດັງສະໜັ່ນຫວັ່ນໄຫວ.

ຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ ຮັບຮອງເອົາມະຕິ ຂອງຄະນະກຳມະການໃຫຍ່ຫວຽດມິນ ກ່ຽວກັບການລຸກຮືຂຶ້ນທົ່ວປະເທດ ແລະ ຜ່ານມະຕິວ່າດ້ວຍ "ການຍາດເອົາອຳນາດໃນທົ່ວປະເທດ ແລະ ດຳເນີນສິບໜ້າທີ່ອັນສຳຄັນ ໃນໂຄງການ ການເມືອງຂອງຫວຽດມິນ ໃຫ້ປະກົດເປັນຈິງ". ໃນຈຳນວນໜ້າທີ່ດັ່ງກ່າວ ມີໜ້າທີ່ອັນລະອຽດຕໍ່ໄປນີ້: ໂຄ່ນລົ້ມອຳນາດປົກຄອງຂອງພວກຮຸກຮານ ແລະ ພວກລູກແຫລ້ງຕີນມືຂອງພວກເຂົາ, ສ້າງຕັ້ງສາທາລະນະລັດປະຊາທິປະໄຕ, ປະກອບອາວຸດໃຫ້ທົ່ວປວງຊົນ, ມອບສິດປະຊາທິປະໄຕຢ່າງກວ້າງຂວາງໃຫ້ແກ່ປະຊາຊົນ, ດຳເນີນການປະຕິຮູບປະຊາທິປະໄຕ ໃນຂົງເຂດເສດຖະກິດ-ສັງຄົມ, ສ້າງຕັ້ງສາຍພົວພັນແບບມິດຕະພາບ ແລະ ການຮ່ວມມືກັບປະເທດພັນທະມິດຕ້ານຟາດຊິດ ແລະ ປະຊາຊາດທີ່ຕໍ່ສູ້ເພື່ອເອກະລາດ ແຫ່ງຊາດ.

ກອງປະຊຸມໃຫຍ່ຮັບຮອງເອົາທຸງຊາດຂອງສາທາລະນະລັດໃນອະນາຄົດຊຶ່ງເປັນທຸງທີ່ມີພື້ນສີແດງ, ຢູ່ກາງມີດາວຄຳຫ້າແຈ, ສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອປົດປ່ອຍຫວຽດນາມ ທີ່ປະກອບດ້ວຍ ໑໑ ຄົນ. ໂຮ່ຈິມິນ ຖືກເລືອກຢ່າງເອກະສັນ ໃຫ້ເປັນປະທານຄະນະກຳມະການດັ່ງກ່າວ.

ຢູ່ຕີນພູແຫ່ງນີ້ ໄດ້ທຳພິທີປະຕິຍານຕົວຢ່າງຄຶກຄື້ນ ຂອງສະມາຊິກຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມ. ຄະນະຜູ້ຕາງໜ້າປະຊາຊົນທ້ອງຖິ່ນ ຄະນະໜຶ່ງ ຊຶ່ງມີຊາວນາອາວຸໂສໜຶ່ງຄົນ ແມ່ຍິງໜຶ່ງຄົນ ເປັນຜູ້ຕາງໜ້າຊົນຊາດ ສ່ວນໜ້ອຍ ແລະ ຫລານນ້ອຍໜຶ່ງຄົນ ມາອວຍພອນຜູ້ແທນກອງປະຊຸມໃຫຍ່. ຫລັງຈາກທີ່ຜູ້ຕາງໜ້າດັ່ງກ່າວ ຈົບຄຳອວຍພອນ ແລະ ມອບຂອງຂວັນເລັກໆນ້ອຍໆຂອງທ້ອງຖິ່ນແກ່ຄະນະປະທານກອງປະຊຸມໃຫຍ່, ທັນໃດນັ້ນ ໂຮ່ຈິມິນ ກໍ່ວາຍໜ້າໄປກຳຜູ້ແທນ ກອງປະຊຸມໃຫຍ່ແລ້ວເວົ້າວ່າ:

"ສະຫາຍຜູ້ແທນ ແລະ ສະມາຊິກຄະນະ ກຳມະການແຫ່ງຊາດເພື່ອ ປົດປ່ອຍ

ຫວຽດນາມ, ພວກສະຫາຍຮູ້ສະພາບຊີວິດຂອງຫລານນ້ອຍຄົນນີ້ບໍ ? ຢູ່ປະເທດອື່ນໆໝູ່ເພື່ອນອາຍຸຮຸ່ນດຽວກັນກັບຫລານຄົນນີ້ ພວມໄປໂຮງຮຽນ, ຫລິ້ນຢູ່ກັບເຄື່ອງຫລິ້ນ ກິນອີ່ມນຸ່ງອຸ່ນ...ສ່ວນຫລານນ້ອຍຜູ້ນັ້ນ ຂ້າພະເຈົ້າຮູ້ວ່າ ຫາກໍ່ຍ່າງເຂົ້າ ໗ ຂວບ, ແຕ່ວ່າມື້ໃດກໍ່ຕ້ອງໄປລ້ຽງຄວາຍຫາຟືນໃນປ່າ ແລະ ບໍ່ມີເວລາໃດຈະໄດ້ຈັບປື້ມ".

ທ່າມກາງບັນຍາກາດອັນງຽບສະງັດ ຜູ້ໃດກໍລ້ວນແຕ່ໄດ້ຍິນສຽງເວົ້າ ອັນຫນັກແຫນ້ນຂອງເພິ່ນແຕ່ລະຄຳທີ່ວ່າ:

"ຫນ້າທີ່ຂອງກຳມະການຄະນະກຳມະການແຫ່ງຊາດເພື່ອປົດປ່ອຍ ຫວຽດນາມ ແລະ ຂອງຜູ້ແທນທັງຫມົດແມ່ນ ຕ້ອງຍາດເອົາເອກະລາດມາໃຫ້ປະເທດຊາດ, ຕ້ອງເຮັດໃຫ້ລູກຮັກຂອງພວກເຮົາໄດ້ກິນອີ່ມ, ນຸ່ງອຸ່ນ, ໄດ້ສຶກສາຮ່ຳຮຽນດ້ວຍທຸກໆວິທີທາງ. ເປົ້າຫມາຍຂອງການປະຕິວັດຂອງພວກເຮົາ ກ່ອນອື່ນຫມົດຕ້ອງເປັນຄືຈັ່ງຊັ້ນ. ສະຫາຍຈົ່ງຈົດຈຳຄຳປະຕິຍານຂອງພວກເຮົາໃນວັນນີ້ ແລະ ຈົ່ງປະຕິບັດຕາມຄຳປະຕິຍານ ດັ່ງກ່າວ".

ທຸກຄົນຕັ້ງໃຈຟັງຄຳເວົ້າແຕ່ລະຄຳຂອງຜູ້ນຳພາການປະຕິວັດ ແລະ ນ້ຳຕາຂອງເຂົາເຈົ້າໄຫລຜ່ານພວງແກ້ມອອກມາຢ່າງບໍ່ຮູ້ສຶກຕົວ ດ້ວຍຄວາມຕື້ນຕັນໃຈ: ທັງຄວາມເຈັບປວດ ອັນຂົມຂື່ນຍ້ອນຄວາມທຸກທໍລະມານທີ່ໄດ້ປະສົບມາ ທັງຄວາມປາບປື້ມຍິນດີຈົນຫາອັນປຽບບໍ່ໄດ້ ເມື່ອໄດ້ເຫັນການປ່ຽນແປງອັນຍິ່ງໃຫຍ່ທີ່ກຳລັງເລີ່ມຕົ້ນ.

ພໍແຕ່ກອງປະຊຸມໃຫຍ່ປິດລົງ, ໂຮ່ຈິມິນ ກໍ່ສົ່ງຄຳຮຽກຮ້ອງເຖິງປະຊາຊົນວ່າ:

"ເພື່ອນຮ່ວມຊາດທີ່ຮັກແພງທັງຫລາຍ !ກ່ອນຫນ້ານີ້ສີ່ປີ ຂ້າພະເຈົ້າ ໄດ້ສົ່ງຈົດຫມາຍຮຽກຮ້ອງມາຍັງເພື່ອນຮ່ວມຊາດເຮົາຈົ່ງສາມັກຄີກັນ, ຍ້ອນມີຄວາມສາມັກຄີ ຈຶ່ງມີກຳລັງ, ມີກຳລັງຈຶ່ງຍາດເອົາເອກະລາດ ອິດສະຫລະພາບໄດ້.

ປະຈຸບັນ ກອງທັບຍີ່ປຸ່ນໄດ້ແຕກມຸ່ນທະລາຍແລ້ວ, ຂະບວນການກູ້ຊາດ ແຜ່ລາມໄປທົ່ວປະເທດ. ສັນນິບາດເພື່ອຫວຽດນາມເອກະລາດ (ຫວຽດມິນ) ມີສະມາຊິກເປັນສິບໆລ້ານຄົນທີ່ເຕົ້າໂຮມທຸກໆຊັ້ນຄົນຢູ່ໃນສັງຄົມ ຄືປັນຍາຊົນ, ຊາວນາ, ກຳມະກອນ, ທະຫານ, ພໍ່ຄ້າ, ທຸກຊົນເຜົ່າຄື ຫວຽດ, ໂທ, ນຸ່ງ, ເມືອງ, ມານ...

ຫວ່າງບໍ່ດົນມານີ້ ຫວຽດມິນ ໄດ້ຮຽກໂຮມກອງປະຊຸມໃຫຍ່ແຫ່ງຊາດຂອງບັນດາຜູ້ແທນປະຊາຊົນ ຊຶ່ງໄດ້ເລືອກຕັ້ງຄະນະກຳມະການແຫ່ງຊາດເພື່ອປົດປ່ອຍ ຫວຽດນາມເຊິ່ງມີຫນ້າທີ່ນຳພາການຕໍ່ສູ້ເພື່ອເອກະລາດແຫ່ງຊາດໃນທົ່ວປະເທດ...

ເພື່ອນຮ່ວມຊາດທີ່ຮັກແພງທັງຫລາຍ ! ນາທີແຫ່ງການຕັດສິນໂຊກຊາຕາ ຂອງຊາດເຮົາໄດ້ມາຮອດແລ້ວ. ເພື່ອນຮ່ວມຊາດທົ່ວປະເທດຈົ່ງລຸກຮື້ນຕໍ່ສູ້ ເພື່ອປົດປ່ອຍຕົນເອງ. ບຸກໜ້າກ້າວໄປ ໃຕ້ລັນທຸງຫວຽດມິນ ຈົ່ງອາດຫານກ້າວຂຶ້ນ !"

໔

ວັນທີ ໑໖ ເດືອນສິງຫາ ໂດຍປະຕິບັດຕາມຄຳສັ່ງຂອງຄະນະກຳມະການ ກອງທະຫານປົດປ່ອຍໄດ້ເຄື່ອນທັບຈາກເຕີນຈາວມຸ່ງໜ້າສູ່ເຂດປາກແມ່ນ້ຳແດງແລະຮ່າໂນ້ຍ ໂດຍຫລີກປ້ອມທີ່ໝັ້ນໃຫຍ່ ຊຶ່ງທະຫານຍີ່ປຸ່ນຍັງຕັ້ງຄ້າຍຢຶດຄອງຢູ່. ບົນເສັ້ນທາງທີ່ເຂົາເຈົ້າຍ່າງຜ່ານນັ້ນ ອຳນາດໃນທຸກແຫ່ງຕົກຢູ່ໃນກຳມືປະຊາຊົນຕາມລຳດັບ. ສອງສາມວັນ ກ່ອນທີ່ກຳລັງປະກອບອາວຸດ ອັນຕົ້ນຕໍຂອງການປະຕິວັດ ຈະໄປຮອດຮ່າໂນ້ຍນັ້ນ,ຢູ່ຮ່າໂນ້ຍພັດໄດ້ເກີດມີເຫດການ ທີ່ມີຜົນສະທ້ອນອັນຕັດສິນຊີ້ຂາດ ຕໍ່ບາດກ້າວເດີນ ທັງໝົດຂອງການລຸກຮື້ນທົ່ວປະເທດ.

ພາຍຫລັງຮັບຂ່າວວ່າຍີ່ປຸ່ນຍອມຈຳນົນ ຢ່າງບໍ່ມີເງື່ອນໄຂແລ້ວ ແລະ ອີງຕາມຄຳສັ່ງທີ່ກ່າວມາຂ້າງເທິງຂອງຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນນັ້ນ, ຄະນະບໍລິຫານງານຂອງອົງຄະນະພັກແຂວງບັກກີ່ ໄດ້ຕັດສິນໃຈກ້າວໄປສູ່ການລຸກຮື້ນ ແລະ ການຍາດເອົາອຳນາດ ຢູ່ທົ່ວດິນແດນບັກກີ່ ແລະ ກ່ອນອື່ນ ແມ່ນຢູ່ຮ່າໂນ້ຍ ຊຶ່ງເປັນສຳນັກງານ ຂອງຜູ້ບັນຊາການສູງສຸດກອງທັບຍີ່ປຸ່ນ ຢູ່ອິນດູຈີນ. ໜ້າທີ່ແມ່ນຢູ່ບ່ອນວ່າ ຕ້ອງໃຊ້ການລຸກຮື້ນ ຢ່າງແຂງແຮງຂອງມະຫາຊົນ ເພື່ອທັບມ້າງ ເລ່ກົນຂອງພວກຍີ່ປຸ່ນຜູ້ຍຶດຄອງທີ່ຈະມອບອຳນາດໄປໃຫ້ລັດຖະບານຫຸ່ນຂອງເຈົ້າຊີວິດ,ຕ້ອງຍຶດເອົາສູນກາງອັນສຳຄັນ ຢູ່ນະຄອນຫລວງ, ດຶງດູດເອົາບຸກຄົນສຳຄັນທີ່ເປັນໃຈ ກັບການປະຕິວັດ ມາຢູ່ນຳຝ່າຍຕົນ, ຈຳໃຫ້ກຳລັງນິຍົມຍີ່ປຸ່ນ ແລະ ກຳລັງປະຕິການອື່ນ ໆ ຍອມຈຳນົນຕໍ່ການປະຕິວັດ.

ໃນວັນທີ ໑໗ ເດືອນສິງຫາ ສະພາທີ່ ປຶກສາບັກກີ່ ຊຶ່ງສ່ວນໃຫຍ່ແມ່ນ ຜູ້ຕາງໜ້າຂອງພັກດາຍຫວຽດ ທີ່ນິຍົມຍີ່ປຸ່ນ ໄດ້ຮຽກໂຮມກອງປະຊຸມຢ່າງຟ້າວຟັ່ງ ຢູ່ພະລາຊະວັງ ຂອງຮ່າໂນ້ຍ. ສະພາດັ່ງກ່າວສ້າງຕັ້ງ "ຄະນະກຳມະການກູ້ຊາດ" ແລະ ຕົກ

ລົງກັນໃນຕອນບ່າຍວັນດັ່ງກ່າວວ່າ ຈະຈັດຕັ້ງການເດີນຂະບວນຂອງມະຫາຊົນຂຶ້ນ ຢູ່ທີ່ສະໜາມຫລວງຂອງນະຄອນຫລວງ ເພື່ອສະແດງໃຫ້ເຫັນນ້ຳໃຈຈົງຮັກພັກດີຕໍ່ເຈົ້າຊີວິດບາວດາຍ. ພໍແຕ່ໜຶ່ງໃນຈຳນວນຜູ້ຈັດຕັ້ງມິດຕິງອ່ານລາຍການ ພັດມີຊາວໜຸ່ມທ່າທາງຫ້າວຫັນຈຳນວນໜຶ່ງ ຊຶ່ງເປັນຜູ້ແທນພັກປະຊາທິປະໄຕ ຍ່າງຂຶ້ນໄປເທິງເວທີ. ໜຶ່ງໃນຈຳນວນຊາວໜຸ່ມດັ່ງກ່າວ ຮຽກຮ້ອງໃຫ້ຝູງຊົນສາມັກຄີກັນຢູ່ອ້ອມຂ້າງຫວຽດມິນ ໃນການຕໍ່ສູ້ ເພື່ອປະເທດຫວຽດນາມເອກະລາດຢ່າງແທ້ຈິງ. ທຸງແດງດາວຄຳຫ້າແຈ ຜືນໃຫຍ່ປະກົດຂຶ້ນເໜືອຫົວຂອງຝູງຊົນ. ທຸງຜືນອື່ນເປັນສິບໆຜືນກໍຖືກຊູສູງຂຶ້ນ. ທຸງຂອງບາວດາຍ ຢູ່ເທິງເວທີ ຖືກດຶງລົງແລ້ວເອົາທຸງຫວຽດມິນໃສ່ແທນ. ພວກທີ່ຈັດຕັ້ງມິດຕິງຕ່າງກໍກະວົນກະວາຍ, ພວກເຂົາບໍ່ສາມາດຄວບຄຸມສະພາບການໄດ້ອີກແລ້ວ. ຝູງຊົນເປັນໝື່ນໆ ລ້ວນແຕ່ຮ້ອງຄຳຂວັນສອງຂໍ້ດ້ວຍຄວາມກະຕືລືລົ້ນວ່າ: "ຫວຽດນາມເອກະລາດໝັ້ນຍືນ !", "ຫວຽດມິນໝັ້ນຍືນ!".

ຕະຫລອດວັນທີ ໑໘ ເດືອນສິງຫາ ການໂຮມຊຸມນຸມມິດຕິງ, ການເດີນຂະບວນໄດ້ດຳເນີນໄປ ຢູ່ໃນຕົວເມືອງໃຫຍ່ພາຍໃຕ້ຄຳຂວັນຂອງຫວຽດມິນ. ທະຫານລາດກອງຫລອນຂອງຫວຽດມິດ ສັບຊ້ອນເປັນຈຸໜ່ວຍສູ້ຮົບ ຢູ່ຕາມຈຸດສຳຄັນທີ່ສຸດຂອງ ຮ່າໂນ້ຍ. ອາວຸດ, ລູກກະສູນປືນ ຖືກສົ່ງເຂົ້າໃຈກາງຕົວເມືອງ, ສາຍຕິດຕໍ່ຖືກສ້າງຕັ້ງຂຶ້ນ, ທຸງ ແລະ ປ້າຍໂຄສະນາໄດ້ຖືກກະກຽມແລ້ວ.

ມື້ລຸນມາ ຕອນ ໑໐ ໂມງເຊົ້າ ການໂຮມຊຸມນຸມມິດຕິງໃຫຍ່ ເລີ່ມຕົ້ນແຕ່ ສະໜາມຫລວງໂຮງລະຄອນແຫ່ງຊາດ. ຂະບວນແຫ່ທີ່ມາຈາກທຸກຈອກທຸກແຈ ຂອງຕົວເມືອງ ມຸ່ງໜ້າສູ່ສະໜາມຫລວງ ພາຍໃຕ້ທຸງສີແດງ. ຢູ່ຕໍ່ໜ້າຄົນເປັນແສນ ຜູ້ຕາງໜ້າອົງຄະນະພັກກຳແພງນະຄອນຂອງພັກກອມມູນິດອິນດູຈີນ ແລະ ຄະນະກຳມະການການທະຫານປະຕິວັດກຳແພງນະຄອນ ຮຽກຮ້ອງໃຫ້ມະຫາຊົນຈົ່ງໂຄ່ນລົ້ມອຳນາດ ຂອງພວກຍີ່ປຸ່ນ ຜູ້ຍຶດຄອງ ແລະ ລູກແຫລ້ງຕີນມືຂອງພວກເຂົາໃນທັນທີທັນໃດໂລດແລ້ວສ້າງຕັ້ງລັດຖະບານປະຊາຊົນ ແລະ ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕທີ່ມີເອກະລາດ ແລະ ມີອະທິປະໄຕ.ຕົກມາຮອດຕອນທ່ຽງ ກະແສອັນໜາແໜ້ນ ຂອງພວກເດີນຂະບວນ ຫລູຫລັ່ງຍຶດຄອງສຳນັກງານຄະນະກຳມະການຂອງລັດຖະບານທີ່ນິຍົມຍີ່ປຸ່ນ. ທະຫານປ້ອງກັນສຳນັກງານດັ່ງກ່າວຖືກປົດອາວຸດ. ສະມາຊິກຂອງຄະນະກຳມະການຖືກຂັບໄລ່. ອີກບໍ່ດົນ ພວກລູກຮົບອີກຈຳນວນໜຶ່ງກໍຍຶດເອົາຄ່າຍທະຫານ ຮັກສາ

ຄວາມສະຫງົບ ແລະ ສາງອາວຸດ. ຕົກມາຮອດຕອນມືດຊຸ້ມຂອງວັນທີ ໑໙ ເດືອນສິງຫາ ໃນຕົວຈິງ ຂອດສຳຄັນທີ່ສຸດທັງໝົດຂອງຕົວເມືອງ, ສຳນັກງານຕ່າງໆ ແລະ ຈຸດຍຸດທະສາດອື່ນໆ ໄດ້ຕົກຢູ່ໃນກຳມືຂອງປະຊາຊົນຜູ້ລຸກຮືຂຶ້ນ.

ໄຊຊະນະຂອງການລຸກຮືຂຶ້ນດັ່ງໃຫຍ່ ຢູ່ຮ່າໂນ້ຍ ໄດ້ເປີດໂອກາດໃຫ້ການປະຕິ-ວັດ ຂະຫຍາຍຕົວຢ່າງໄວວາ ລົງສູ່ພາກໃຕ້. ມື້ລຸນມາ ອຳນາດປົກຄອງປະຊາຊົນ ໄດ້ຖືກສ້າງຕັ້ງຂຶ້ນ ຢູ່ແຂວງແທັງຫົວ, ເງອານ, ຮ່າຕິງ. ການຍາດເອົາອຳນາດປົກຄອງຢູ່ເວ້ ຊຶ່ງເປັນພະລາຊະສຳນັກຂອງເຈົ້າຊີວິດບາວດາຍ ແລະ ລັດຖະບານຫຸ່ນ ແມ່ນບັນຫາອັນດັບຕໍ່ໄປ. ວັນທີ ໒໑ ເດືອນສິງຫາ ຄະນະກຳມະການແຫ່ງຊາດ ເພື່ອປົດປ່ອຍຫວຽດນາມ ໄດ້ສົ່ງໂທລະເລກໄປຫາບາວດາຍ ໂດຍຮຽກຮ້ອງໃຫ້ພະອົງສະຫລະລາຊະສົມບັດ. ເຖິງແມ່ນວ່າໄຊຊະນະຂອງການປະຕິວັດ ໄດ້ປະຈັກແຈ້ງແລ້ວກໍຕາມ, ແຕ່ໂຮຈີມິນ ແລະ ຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ກໍ່ເຫັນວ່າ ເພື່ອຜົນປະໂຫຍດທາງຍຸດໂທບາຍ ບໍ່ຄວນໃຊ້ກຳລັງອາວຸດ ເພື່ອໂຄ່ນລົ້ມລະບອບລາຊາທິປະໄຕ ທາງທີ່ດີກວ່າໝູ່ ເພື່ອຈຸດປະສົງສ້າງຄວາມແຕກແຍກຂຶ້ນຢູ່ໃນຄ້າຍສັດຕູ ຂອງການປະຕິວັດ, ຕ້ອງເຮັດແນວໃດໃຫ້ຈັກກະພັດ ບາວດາຍ ສະຫລະລາຊະສົມບັດ ດ້ວຍຄວາມສະໝັກໃຈ.

ວັນທີ ໒໓ ເດືອນສິງຫາ ເມືອງເວ້ ປະດັບປະດາ ດ້ວຍທຸງສີແດງ, ມະຫາຊົນແຫ່ຂະບວນໄປຕາມຖະໜົນ, ຮຽກຮ້ອງໃຫ້ມອບອຳນາດທັງໝົດໃຫ້ແກ່ຫວຽດມິນ . ປະຊາຊົນລຸກຮືຂຶ້ນ ບຸກຍຶດເອົາສຳນັກງານຂອງລັດຖະບານ ເຈີນຈອງກິມ.

ບາວດາຍ ຍັງລັ່ງເລບໍ່ຍອມຕອບຄຳຮຽກຮ້ອງຂອງມະຫາຊົນ ທີ່ຫວັງໃຫ້ ພະອົງສະຫລະລາຊະສົມບັດດ້ວຍຕົນເອງ, ແຕ່ທຸກສິ່ງທຸກຢ່າງລ້ວນແຕ່ຊີ້ໃຫ້ເຫັນວ່າ ນັ້ນຄືນາທີສຸດທ້າຍຂອງລະບອບລາຊາທິປະໄຕຫວຽດນາມທີ່ໄດ້ແກ່ຍາວມາໄດ້ສອງພັນປີ. ມື້ທີ່ໄດ້ຮັບໂທລະເລກຂອງຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມ ບາວດາຍ ອອກຄຳສັ່ງໃຫ້ພວກອາດຍາເສນາອາມາດຊອກຮູ້ໃນທັນທີເບິ່ງວ່າ ອາດເຊື່ອໄດ້ບໍ ໃນຄວາມເວົ້າເປົ່າຂ່າວ ທີ່ວ່າໂຮຈີມິນ ປະທານຄະນະກຳມະການແຫ່ງຊາດ ເພື່ອປົດປ່ອຍຫວຽດນາມ ແລະ ຫງວຽນອາຍກວັກ ຜູ້ລີ້ຊາຜາກົດ ເປັນຄົນໆດຽວ. ມື້ລຸນມາ ເມື່ອໄດ້ຮັບລາຍງານຕື່ມອີກວ່າ ຂ່າວເລົ່າລືດັ່ງກ່າວເປັນຄວາມຈິງແທ້ ບາວດາຍ ຮ້ອງຂຶ້ນດ້ວຍຄວາມໝົດຫວັງວ່າ:

"ຖ້າເປັນແນວນັ້ນແລ້ວ ພະອົງເຮົາກໍ່ບໍ່ມີວິທີໃດອື່ນ ນອກຈາກຍອມຮັບ ຄຳຮຽກຮ້ອງໃຫ້ສະຫລະລາຊະສົມບັດ".

ວັນທີ ໒໕ ເດືອນສິງຫາ ຄະນະຜູ້ແທນຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມເຂົ້າມາຮອດເວ້, ຄະນະຖືກຕ້ອນຮັບຢ່າງອົບອຸ່ນຈາກປະຊາຊົນ. ໃນວັນ ທີ ໓໐ ເດືອນສິງຫາ, ໄດ້ມີການດຳເນີນພິທີສະຫລະລາຊະສົມບັດຢ່າງເປັນ ທາງການຂອງເຈົ້າຊີວິດ ບາວດາຍ. ທຸງສີເຫລືອງຂອງລະບອບລາຊາທິປະໄຕຖືກປົດລົງ ແລ້ວທຸງສີແດງດາວຄຳຫ້າແຈຂອງປະເທດຫວຽດນາມໃຫມ່ ກໍ່ຖືກຊັກຂຶ້ນປາຍເສົາສູງແລະປິວສະບັດຕາມສາຍລົມ. ເຈົ້າຊີວິດບາວດາຍ ທີ່ນຸ່ງເສື້ອສີເຫລືອງແສວໂຕນາກ ອ່ານຄຳປາໄສທີ່ໄດ້ກະກຽມໄວ້ໃຫ້ລ່ວງຫນ້າ ເພື່ອປະກາດສະຫລະລາຊະບັນລັງ. ມີສຽງຮ້ອງ ສະແດງຄວາມເຫັນດີດັງຂຶ້ນໃນຂະນະທີ່ພະອົງເວົ້າ:

"ພະອົງເຮົາ ຂໍເປັນພົນລະເມືອງຂອງປະເທດທີ່ມີອິດສະຫລະພາບ ດີກວ່າເປັນເຈົ້າຊີວິດຂອງປະເທດທີ່ເປັນຂ້າທາດ".

ຕໍ່ຈາກນັ້ນ ບາວດາຍ ມອບເຄື່ອງຫມາຍແຫ່ງອຳນາດຂອງຈັກກະພັດ ໃຫ້ແກ່ ຜູ້ຕາງຫນ້າຂອງປະຊາຊົນທີ່ລຸກຮືຂຶ້ນ.

ຢູ່ໄຊ່ງ່ອນ ຊຶ່ງເປັນຕົວເມືອງສຳຄັນອັນດັບສາມຂອງປະເທດ ສະພາບການຂະຫຍາຍຕົວຢ່າງສັບສົນທີ່ສຸດ. ຢູ່ແຫ່ງນີ້ ທັງຂອງກຳລັງນິຍົມຍີ່ປຸ່ນ ແລະ ພັກຝ່າຍ ປະຕິການອື່ນໆຍັງເຂັ້ມແຂງຢູ່, ໃນຂະນະດຽວກັນ ອົງຄະນະພັກກອມມູນິດອິນດູຈີນ ຊ້ຳພັດອ່ອນແອ ເນື່ອງຈາກໄດ້ຮັບຄວາມເສຍຫາຍຢ່າງໃຫຍ່ຫລວງໃນຊຸມປີກ່ອນ. ວັນທີ ໑໖ ເດືອນສິງຫາ ລາຊະທູດຂອງເຈົ້າຊີວິດຄືຫງວຽນວັນເຊີມ ໄດ້ມາເຖິງໄຊ່ງ່ອນ ແລະດຳເນີນການເຈລະຈາຢ່າງຮີບດ່ວນກັບພວກຍີ່ປຸ່ນ ກ່ຽວກັບການຈັດສົ່ງອາວຸດໃຫ້ພັກ ຝ່າຍ ແລະ ອົງການຈັດຕັ້ງທີ່ນິຍົມຍີ່ປຸ່ນ. ຍິ່ງໄປກວ່ານັ້ນ ໃນມື້ດຽວກັນຢູ່ໄຊ່ງ່ອນ ແລະ ເຈີເລີນ ຊານເມືອງ ໄດ້ມີການຊ່ອງສຸມຜູ້ນັບຖືສາສະຫນານິກາຍ "ກາວດາຍ" ທີ່ນິຍົມ ຍີ່ປຸ່ນ ຢ່າງວົງວາຍນັບເປັນພັນໆຄົນ ແລະ ມີກອງປະກອບອາວຸດສະເພາະຂອງຕົນ . ນອກນັ້ນຍັງມີສິບໆກຸ່ມທີ່ນິຍົມຍີ່ປຸ່ນຢູ່ໃນກະໂຕຕົວເມືອງ ແລະ ເຂດນອກເມືອງ, ພວກນີ້ມີອາວຸດ ແລະ ມີສະບຽງອາຫານແຮໄວ້, ມີເງິນຄຳ ແລະ ຍານພາຫະນະ,ມີການຕິດຕໍ່ກັບຜູ້ບັນຊາກອງທັບຍີ່ປຸ່ນ. ພວກຝິນປະຕິວັດຝາກຄວາມຫວັງອັນຕົ້ນຕໍໄວ້ນຳ ແນວໂຮມສຳພັນທະພາບແຫ່ງຊາດ ທີ່ສ້າງຕັ້ງຂຶ້ນໃນວັນທີ ໑໔ ເດືອນສິງຫາ, ໃນນັ້ນ ນອກຈາກ

ພັກຝ່າຍທີ່ນິຍົມຍີ່ປຸ່ນແລ້ວ ຍັງມີຜູ້ຕາງໜ້າກຸ່ມ "ຕໍ່ສູ້" ທີ່ນິຍົມກຸ່ມ ໂຕຮຊະກີທີ່ເຂັ້ມແຂງພໍສົມຄວນ, ພວກນັບຖືສາສະໜານິກາຍ "ກາວດາຍ" ແລະ "ຮວາຮ່າວ".

ພັກກອມມູນິດອິນດູຈີນ ແລະ ຫວຽດມິນ ນຳໃຊ້ອົງການຈັດຕັ້ງກຳມາຊີບ ໃນຕົວເມືອງ ຊຶ່ງມີຈຳນວນກຳມະກອນເຖິງ ໑໔໐ ພັນຄົນນັ້ນ ເປັນຄືອາວຸດເພື່ອສູ້ຢັນກັບພວກປະຕິການ. ສະມາຊິກຂອງອົງການຈັດຕັ້ງຊາວໜຸ່ມ ແລະ ພົນທະຫານຂອງອະດີດກອງທັບເຈົ້າຊີວິດ ເກືອບ ໘໐.໐໐໐ ຄົນລ້ວນສະໜັບສະໜູນຫວຽດມິນ. ເພື່ອດຶງດູດເອົາອົງການຈັດຕັ້ງ ແລະ ກຳລັງທີ່ມີຫລັກໝັ້ນເຄິ່ງໆກາງໆ ເຂົ້າຮ່ວມການລຸກຮື້ຂຶ້ນນັ້ນ, ຜູ້ຕາງໜ້າຫວຽດມິນໄດ້ພົບພໍ້ຫລາຍຄັ້ງກັບສະມາຊິກຈຳນວນຫລວງຫລາຍ ຂອງແນວໂຮມສຳພັນທະພາບແຫ່ງຊາດ, ແລະ ໄດ້ອະທິບາຍເປົ້າໝາຍການເມືອງຂອງຫວຽດມິນໃຫ້ພວກເຂົາຟັງຢ່າງຈະແຈ້ງ ແລະ ມີບໍ່ໜ້ອຍຄົນທີ່ໄດ້ເຫັນດີຮ່ວມມືກັບຫວຽດມິນ.

ເຊັ່ນດຽວກັນກັບຢູ່ຮ່າໂນ້ຍ ເພື່ອຍາດເອົາອຳນາດ ບັນດາຜູ້ນຳຂອງ ຫວຽດມິນຕັດສິນໃຈສວຍໃຊ້ການແຫ່ຂະບວນເພື່ອສະໜັບສະໜູນລາຊະທູດຫວງວຽນວັນເຊິນ, ຊຶ່ງແມ່ນແນວໂຮມສຳພັນທະພາບແຫ່ງຊາດ ມີແຜນການຈະຈັດຂຶ້ນໃນວັນທີ ໑໗ ເດືອນສິງຫາ. ແນວໂຮມດັ່ງກ່າວ ສະແດງກຳລັງຂອງພວກເຂົາພາຍໃຕ້ຄັນທຸງສີເຫລືອງ ຂອງເຈົ້າຊີວິດ, ສ່ວນກຸ່ມຄົນທີ່ນັບຖືສາສະໜານິກາຍ ກາວດາຍ ພັດຍົກຄຳຂວັນໃຫ້ເສີມຂະຫຍາຍມິດຕະພາບຫວຽດ-ຍີ່ປຸ່ນ. ແຕ່ວ່າການເຄື່ອນໄຫວຂອງພວກປະຕິການມີທ່າວ່າຈະສິ້ນຫວັງ ເພາະວ່າຂ່າວຄາວກ່ຽວກັບໄຊຊະນະຂອງຫວຽດມິນຢູ່ຮ່າໂນ້ຍ, ເວ້ ແລະ ຕົວເມືອງອື່ນໆ ກໍເຊັ່ນດຽວກັບການທີ່ ບາວດາຍ ກະກຽມສະຫລະລາຊະສົມບັດ ໄດ້ເຮັດໃຫ້ການເຄື່ອນໄຫວຂອງພວກເຂົາອ່ອນເພຍເປ້ຍລ້ອຍ. ໃນສະພາບການດີແນວນີ້ຫວຽດມິນສະເໜີຕໍ່ອົງການຈັດຕັ້ງຮັກຊາດທັງໝົດ ໃຫ້ເຂົ້າຮ່ວມໃນການສ້າງຕັ້ງຄະນະກຳມະການ ປະຊາຊົນ ປະຕິວັດ. ເວລາ ໓ ໂມງເຊົ້າ ສະມາຊິກຂອງຄະນະກຳມະການໄດ້ມາປະກົດຕົວຕໍ່ໜ້າມະຫາຊົນ ທີ່ເດີນຂະບວນ. ຄະນະກຳມະການມີ ໓ ຄົນ ໃນນັ້ນ ໒ ຄົນນັບລວມທັງປະທານຄະນະກຳມະການ ແມ່ນຜູ້ແທນຂອງຫວຽດມິນ, ດັ່ງນັ້ນ ການປະຕິວັດເດືອນສິງຫາ ຈຶ່ງຍາດເອົາໄຊຊະນະໜຶ່ງອີກທີ່ສຳຄັນທີ່ສຸດມາໄດ້ແລ້ວ.

ໂດຍຮູ້ແລ້ວວ່າ ມີສະພາບການສັບສົນທີ່ສຸດຢູ່ໄຊງ່ອນ, ວັນທີ ໑໓ ເດືອນສິງຫາ ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ໄດ້ແຕ່ງຕັ້ງຄະນະຜູ້ແທນ ຂອງຄະນະກຳມະການໃຫຍ່ຫວຽດມິນ ຊຶ່ງແມ່ນສະຫາຍຮວາງກວັກຫວຽດເປັນຫົວໜ້າ ລົງໄປພາກ

ໃຕ້. ສະຫາຍ ຮ່ວາງກວັກທວຽດ ໄດ້ທວນຄືນເຖິງການເດີນທາງຄັ້ງນີ້ດັ່ງຕໍ່ໄປນີ້" ໃນທີ່ສຸດ ຄະນະຂອງພວກເຮົາກໍ່ໄດ້ໄປຮອດ ໄຊງ່ອນ ທີ່ຈົມຢູ່ທ່າມກາງແສງໄຟ ແຈ້ງສະຫວ່າງ ຍິ່ງເຮັດໃຫ້ສີແດງຂອງທຸງສະຫວ່າງສະໄຫວຕື່ມ. ພວກເຮົາໄປພັກຢູ່ວັງນາມໂບ ເຊິ່ງເປັນສຳນັກງານຜູ້ສຳເລັດລາຊະການຝະລັ່ງ ຢູ່ນາມກີ່ ໃນເມື່ອກ່ອນ. ພໍແຕ່ມື້ນຕາຂຶ້ນ ພວກເຮົາໄດ້ຍິນສຽງເຄາະປະຕູ:

"ຫລັງຈາກຮູ້ຂ່າວວ່າ ຜູ້ຕາງໜ້າຄະນະກຳມະການໃຫຍ່ຫວຽດມິນ ໄດ້ມາຮອດໄຊງ່ອນແລ້ວ, ຜູ້ແທນຂອງໜ່ວຍ ແລະ ອົງການຈັດຕັ້ງການເມືອງຕ່າງໆຢາກຈະພົບພໍ້ກັບພວກທ່ານໂດຍດ່ວນ".

ຫລັງຈາກທີ່ພວກເຮົາປຶກສາຫາລື ກັບຄະນະບໍລິຫານງານອົງຄະນະພັກຂັ້ນທ້ອງ-ຖິ່ນແລ້ວ ຂ້າພະເຈົ້າກໍ່ໄປພົບຜູ້ແທນ, ພວກເຂົາຕັ້ງຄຳຖາມຂ້າພະເຈົ້າ ຢ່າງມາກມາຍ ແຕ່ສະຫລຸບແລ້ວ ມີຄຳຖາມດຽວຄືກັນກັບຢູ່ໃນແຂວງອື່ນ ທີ່ພວກເຮົາເດີນທາງຜ່ານມາ, ພວກເຂົາເຈົ້າຖາມວ່າ:

"ຂໍຖາມແດ່ ໂຮ່ຈີມິນແມ່ນໃຜ ? ເພິ່ນແມ່ນ..."

"ບໍ່ມີໃຜອີກຈະເປັນຜູ້ນຳລັດໃໝ່ຂອງພວກເຮົາ ນອກຈາກສະຫາຍ ຫວຽນ-ອາຍກວັກ ທີ່ຮັກແພງ, ຜູ້ນຳການປະຕິວັດທີ່ໄດ້ຮັບຄວາມນັບຖືຈາກໝົດທຸກຄົນ, ນັກລົບທີ່ກ້າແກ່ນຂອງຊົນຊັ້ນກຳມະກອນຂອງພວກເຮົາ, ລູກຮັກຂອງປະຊາຊົນ ແລະ ຜູ້ທີ່ອຸທິດຕົນເອງເພື່ອຮັບໃຊ້ປະຊາຊົນ ?".

ສຽງຮ້ອງໂຮຊົມເຊີຍທີ່ດັງສະໜັ່ນເປັນສິ່ງທີ່ຕອບໂຕ້ຄວາມເວົ້າຂອງຂ້າພະ - ເຈົ້າ:

"ລັດຖະບານຊົ່ວຄາວ ໝັ້ນຍືນ !"

"ປະທານໂຮ່ຈີມິນ ໝັ້ນຍືນ!"

ໃນມື້ນັ້ນເອງ ຂ້າພະເຈົ້າສົ່ງໂທລະເລກໄປພາກເໜືອ: "ຊາວເອັດແຂວງ ທີ່ຂ້າພະເຈົ້າໄດ້ຜ່ານໄປ ລ້ວນແຕ່ຍາດເອົາອຳນາດມາໄດ້. ເວົ້າລວມ ຢູ່ນາມໂບ ທຸກສິ່ງທຸກຢ່າງ ເປັນໄປຕາມທີ່ຕ້ອງການ".

ຮ່າໂນ້ຍສົ່ງໂທລະເລກຕອບວ່າ: "ຈະປະກາດເອກະລາດ ໃນວັນທີ ໒ ເດືອນກັນຍາ".

ດັ່ງນັ້ນ ໃນໄລຍະ ໑໒ ວັນເທົ່ານັ້ນ ທີ່ການປະຕິວັດປົດປ່ອຍຊາດ ໂດຍມີ ພັກກອມມູນິດອິນດູຈີນເປັນຜູ້ນຳພາກໍ່ຍາດເອົາໄຊຊະນະໃນທົ່ວປະເທດມາໄດ້; ເວລານັ້ນພັກມີສະມາຊິກພຽງແຕ່ ໕໐໐໐ ຄົນເທົ່ານັ້ນ. ແອກລາເມືອງຂຶ້ນທີ່ຮັດຄໍປະຊາຊົນຫວຽດນາມກວ່າ ໘໐ ປີ ແລະ ລະບອບລາຊາທິປະໄຕ ທີ່ຄົງຕົວຢູ່ຫລາຍພັນປີ ໄດ້ຖືກຣາພາຍຸລົມແດງແຫ່ງຄວາມຄຽດແຄ້ນຂອງປະຊາຊົນ ປັດກວາດກ້ຽງໃນໄລຍະເວລາອັນສັ້ນໆ.

ພາຍຫລັງທີ່ການປະຕິວັດໄດ້ຮັບໄຊຊະນະ ຢູ່ຮ່າໂນ້ຍ ຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ໄດ້ມອບໃຫ້ສະຫາຍເລີດກໍຖໍ ຂຶ້ນເມືອ ເຂດປົດປ່ອຍໃນທັນທີ ເພື່ອຕ້ອນຮັບເອົາໂຮ່ຈີມິນ ກັບຄືນນະຄອນຫລວງຮ່າໂນ້ຍ. ທະຫານ ປົດປ່ອຍໜຶ່ງກອງຮ້ອຍທີ່ມີຜົນງານເດັ່ນໃນການສູ້ຮົບທຳໜ້າທີ່ປ້ອງກັນປະທານຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມ ບິນເສັ້ນທາງຈາກ ຕິນຈາວ ໄປຮ່າໂນ້ຍ.ການເດີນທາງໃຊ້ເວລາດົນຫລາຍ: ທັງຂີ່ເຮືອ ລ່ອງລົງຕາມລຳນ້ຳ, ທັງຍ່າງບຸກປ່າ ຜ່າດົງດິບ, ບາງຕອນທັງຕ້ອງຫາມປະທານໂຮ່ຈີມິນໃສ່ເປ້ດອຍເຫດວ່າເພິ່ນຍັງບໍ່ແຂງແຮງຫາຍຈາກທີ່ເພິ່ນເປັນໄຂ້ສັ່ນຢ່າງຮ້າຍແຮງ.

ວັນທີ ໒໕ ເດືອນສິງຫາ ປະທານໂຮ່ຈີມິນ ແລະ ສະຫາຍຮ່ວມເດີນທາງໄດ້ຖືກຕ້ອນຮັບໂດຍກອງທະຫານປົດປ່ອຍຢູ່ບ້ານກາ ຊຶ່ງຕັ້ງຢູ່ຊານເມືອງຮ່າໂນ້ຍ. ທຸກຄົນ ໄດ້ສັງເກດເຫັນວ່າ ເພິ່ນມີສຸຂະພາບແຂງແຮງກວ່າເກົ່າຫລາຍ ເມື່ອປຽບໃສ່ເວລາ ຮ່ວມກອງປະຊຸມໃຫຍ່ຢູ່ຕິນຈາວ. ຫລັງຈາກທີ່ເພິ່ນລົງຈາກພູດອຍມາທົ່ງພຽງ, ໂຮ່ຈີມິນໄດ້ປ່ຽນເປັນຊາວນາທຳມະດາຄົນໜຶ່ງຂອງເຂດລຽບຕາມລຳແມ່ນ້ຳ ນຸ່ງທົ່ມ ສີໝາກກະເບົາ.

ເພິ່ນກອດໝົດທຸກຄົນແໜ້ນໆ ແລ້ວກໍ່ຍິ້ມຢ່າງເບີກບານມ່ວນຊື່ນ ແລະ ຮ້ອງຂຶ້ນວ່າ:

"ພວກສະຫາຍເກັ່ງກ້າອາດຫານແທ້ໆເນາະ, ພວກສະຫາຍແມ່ນຜູ້ຊະນະ !"

ໃຜໆກໍ່ຍາດກັນເລົ່າເລື່ອງການລຸກຮື້ຂຶ້ນຢູ່ຮ່າໂນ້ຍ ແລະ ຢູ່ແຫ່ງອື່ນໆ. ດວງຕາທັງຄູ່ຂອງໂຮ່ຈີມິນໃສແຈ້ງຂຶ້ນ ເພິ່ນຕັ້ງໃຈຟັງ ຢ່າງມິດງຽບໝົດທຸກເລື່ອງ ໂດຍບໍ່ສະແດງອອກໃຫ້ເຫັນຄວາມຕື່ນເຕັ້ນໃຈ. ພໍແຕ່ມີຜູ້ເວົ້າຕໍ່ເພິ່ນວ່າ ຄະນະປະຈຳຄະນະບໍລິຫານງານສູນກາງພັກ ຖືວ່າມີຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງທຳພິທີປະກາດ ໃຫ້ປະຊາຊົນຮູ້ ກ່ຽວກັບລາຍຊື່ຂອງຄະນະລັດຖະບານຊົ່ວຄາວ, ເພື່ອໃຫ້ສອດຄ່ອງ ກັບມະຕິ

ກອງປະຊຸມແຫ່ງຊາດຂອງພັກທີ່ເຕີມຈາວຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມ ໄດ້ກາຍເປັນລັດຖະບານຊົ່ວຄາວ ໂດຍອັດຕະໂນມັດ ເທົ່ານັ້ນ, ໂຮ່ຈິມິນ ເກີດຄວາມປະຫລາດໃຈ. ເພິ່ນຍິ້ມອາຍໆແລ້ວເວົ້າວ່າ:

"ເວົ້າຈັ່ງຊັ້ນໝາຍຄວາມວ່າ ຂ້ອຍເປັນຫົວໜ້າລັດຖະບານຊັ້ນບໍ ?"

໕

ເປັນເທື່ອທຳອິດໃນຊີວິດທີ່ໂຮ່ຈິມິນ ຍ່າງບາດຕີນລົງຮ່າໂນ້ຍ ນະຄອນຫຼວງຂອງປະເທດຊາດ. ຮ່າໂນ້ຍເມືອງເກົ່າແກ່ໄດ້ຖືກປະດັບປະດາດ້ວຍທຸງສີແດງ ແລະປ້າຍຄຳຂວັນ, ບັນຍາກາດຟົດຟື້ນປະຕິວັດເປັນພິເສດປົກຄຸມໄປທົ່ວເມືອງ. ເພື່ອຜ່ານກາຍ ໄລຍະທາງ ໓໐໐ ກິໂລແມັດ ຄືຈາກບ້ານດອກບົວ ຊຶ່ງເປັນບ້ານເກີດຂອງເພິ່ນ ໄປຮອດເມືອງຫລວງເກົ່າທັງລອງ ຊຶ່ງເປັນຊື່ຂອງຮ່າໂນ້ຍໃນເມື່ອກ່ອນ ເພິ່ນກໍຕ້ອງໄດ້ເສຍເວລາກວ່າໜຶ່ງສ່ວນສາມຂອງສະຕະວັດ ແລະ ຕ້ອງໄດ້ໄປເກືອບທົ່ວໂລກ.

ກ່ອນນັ້ນ ສອງສາມວັນ ຮ່າໂນ້ຍ ຍັງຢູ່ໃນສະພາບໜ້າສັງເວດທີ່ສຸດ. ຢູ່ທົ່ວທຸກບ່ອນ ເຫັນຖະໜົນຫົນທາງຍັງມີຊາກຄົນຕາຍຍ້ອນອຶດຫິວຢາຍກັນຢູ່ເດຍລະດາດ. ມີຄົນໃຊ້ລົດແກ່ຊາກສົບຄົນຕາຍຂົນອອກໄປໄວ້ຢູ່ນອກເມືອງ ແລະ ຖິ້ມໄວ້ໃນຂຸມລວມ.ແຕ່ວ່າຊາວນາອຶດຫິວຊ້ຳພັດພາກັນຫລັ່ງໄຫລຈາກໝູ່ບ້ານຢູ່ຊານເມືອງເຂົ້າມາໃນ ຕົວເມືອງເພື່ອທົດແທນຈຳນວນຄົນຜູ້ທີ່ຕາຍໄປແລ້ວ.

ໄພທຳມະຊາດຍິ່ງກໍ່ໃຫ້ເກີດມີໄພອຶດຫິວ ໜັກຕື່ມຂຶ້ນຈຸກໄຈ. ເດືອນສິງຫາ ປີ ໑໙໔໕ ນ້ຳໃນແມ່ນ້ຳແດງຍິ່ງຂຶ້ນສູງ ຈົນເຖິງຂັ້ນອັນຕະລາຍ. ຄູກັ້ນນ້ຳຫລາຍຕອນເຊິ່ງບໍ່ໄດ້ຖືກສ້ອມແປງມາເປັນເວລາດົນນານ ຖືກກະແສນ້ຳພັງຂາດສະບັ້ນ. ຫົກແຂວງ ທົ່ງພຽງ ຊຶ່ງເປັນອູ່ເຂົ້າອູ່ນ້ຳພາກເໜືອໄດ້ຈົມຢູ່ພື້ນນ້ຳ. ໂລກອະຫິວາກໍອາລະວາດ ຢ່າງໜັກຢູ່ທົ່ວທຸກເຂດ.

ຮ່າໂນ້ຍຕົກຢູ່ໃນຂັ້ນຈວນຈະສິ້ນໃຈ. ຊ້ຳບໍ່ພໍ ພວກສ່ຽງໄພທີ່ມີທ່າອ່ຽງຕ່າງໆບໍ່ຮູ້ວ່າມາແຕ່ຖ້ຳແຕ່ຮູບ່ອນໃດ ງົມມືດມາຈັດຕັ້ງການເດີນຂະບວນປະທ້ວງຢູ່ຕາມ ທ້ອງຖະໜົນ, ຮ້ອງຄຳຂວັນຊົມເຊີຍປະເທດອາທິດອຸໄທ. ແຕ່ວ່າຊາວນະຄອນຫລວງ ບໍ່ສົນໃຈ

ໄຍດີນຳພວກເຂົາ, ຍ້ອນວ່າຊາວນະຄອນຫລວງສົນໃຈນຳບັນຫາອື່ນ. ຢູ່ທົ່ວທຸກແຫ່ງ ຢູ່ຕາມທາງຮ່ອມອັນແຄບໆ, ຢູ່ຕາມຖະໜົນໃຫຍ່ທີ່ປົກຫຸ້ມດ້ວຍເງົາໄມ້, ອ້ອມໜອງດາບວິເສດ ແລະ ພິເສດແມ່ນ ຢູ່ຕາມທາງນ້ອຍເປື້ອນເປິຂອງຊຸ້ມບ້ານເກົ່າແກ່, ຕະຫລາດມັກເກີດຂຶ້ນປານດອກເຫັດ, ຢູ່ນີ້ສາມາດຊື້ຂາຍເຄື່ອງຂອງທຸກຢ່າງ. ພວກຂີ້ລັກ ແລະ ພວກໂຈນອາລະວາດໜັກຢ່າງເປີດເຜີຍ ຕອນກາງເວັນ. ຕຳຫລວດຍີ່ປຸ່ນຖືດາບ ຊາມູໄລ ຍ່າງເປັນແຖວຍາວຢຽດເຂົ້າມາແທນທີ່ສາລະວັດທະຫານຝະລັ່ງນັ້ນ ໄດ້ຟາດຟັນໄປໂດຍບໍ່ຮູ້ວ່າເປັນຄົນຂີ້ລັກຫລືວ່າຄົນທີ່ບໍ່ມີຜິດຫຍັງຢູ່ບົນທ້ອງຖະໜົນ.

ການປະຕິວັດໄດ້ແຜ່ລາມໄວຄືພາຍຸລົມແດງ ແລະ ໄດ້ປັດກວາດກ້ຽງໝົດທຸກສິ່ງທຸກຢ່າງ. ຈາກນັ້ນສອງສາມວັນເທົ່ານັ້ນ ຮ່ອງຮອຍທີ່ໜ້າຢ້ານກົວຂອງໄພອຶດຫິວ, ພະຍາດຕິດແປດ, ໄພກໍ່ກວນເກືອບວ່າໄດ້ຫາຍຕົວໄປຈາກຖະໜົນຫົນທາງຂອງ ນະຄອນຫລວງ. ຊາວນະຄອນຫລວງໄດ້ຈັດຕັ້ງລະບຽບແບບປະຕິວັດ ດ້ວຍຕົນເອງ. ຄະດີຂີ້ລັກປຸ້ນຈີ້ໄດ້ໝົດສ້ຽງໄປ ລວມທັງພວກຂໍທານ ຊຶ່ງເມື່ອກ່ອນມີເຕັມທ້ອງຖະໜົນຕ່າງໆ,ມາຮອດເວລານີ້ໄດ້ຫາຍຕົວໄປໃສໝົດແລ້ວ.

ຕົກຍາມຄ່ຳ ໂຮ່ຈີມິນ ແລະ ສະຫາຍຮ່ວມເດີນທາງກັບເພິ່ນຖືກພາໄປ ຮອດເຮືອນສອງຊັ້ນເລກທີ ໔໘ ຖະໜົນຮ່າງວາງ ຊຶ່ງເປັນຈຸດປິດລັບຈຸດໜຶ່ງຂອງພັກ. ເຈົ້າຂອງເຮືອນເວົ້ານຳຄົນບ້ານໃກ້ເຮືອນຄຽງວ່າ ເຂົາເຈົ້າມີຍາດພີ່ນ້ອງຢູ່ບ້ານນອກ ມາຢ້ຽມຢາມ. "ພວກຍາດພີ່ນ້ອງ" ເຫລົ່ານີ້ ນຸ່ງຫົ່ມແບບຊາວນາ ຈຶ່ງໝວດ ເບິ່ງແລ້ວບໍ່ຕ່າງຫຍັງກັບພວກຜູ້ເຖົ້າຢູ່ໃນບ້ານ. ເຖິງວ່າການປະຕິວັດໄດ້ຮັບໄຊຊະນະແລ້ວ ກໍຕາມແຕ່ສະພາບການກໍຍັງບໍ່ເປັນປົກກະຕິເທື່ອ ສະນັ້ນມາດຕະການປ້ອງກັນຕົວ ຈຶ່ງເປັນເລື່ອງຈຳເປັນ.

ມື້ລຸນມາ ພັດເກີດເຫດການໜຶ່ງ ຊຶ່ງໃຜໆກໍຫວາດຫວັ່ນມາແຕ່ດົນແລ້ວນັ້ນຂຶ້ນ . ກອງທະຫານກອງທຳອິດຂອງ ຈຽງໄຄເຊັກ ໄດ້ມາປະກົດຕົວຢູ່ຮ່າໂນ້ຍ. ໂດຍຢືນຢູ່ລະບຽບເຮືອນ ໂຮ່ຈີມິນ ແລະ ສະຫາຍຂອງເພິ່ນແນມເຫັນທະຫານຈຽງໄຄເຊັກທີ່ຍ່າງຖືກບາດຕີນສະໜ່ຳສະເໝີ ຢູ່ເທິງທ້ອງຖະໜົນ ດ້ວຍຄວາມກັງວົນ. ບັ້ນຮົບອັນໂດ່ງດັງ "ກອງທັບຈີນ ບຸກເຂົ້າຫວຽດນາມ" ໄດ້ເລີ່ມຂຶ້ນແລ້ວ. ບັ້ນຮົບດັ່ງກ່າວ ເລີ່ມຕົ້ນ ດ້ວຍຄວາມເຫັນດີເຫັນພ້ອມຂອງປະເທດອັງກິດ ກັບອາເມລິກາຜູ້ເປັນພັນທະມິດ.ກະທັ້ງກ່ອນວັນເປີດກອງປະຊຸມ ເຕເຮລານ ເມື່ອເດືອນພະຈິກປີ ໑໙໔໓ ນັ້ນ ໃນຕອນພົບພໍ້ກັບຣູດ

ສະແວນ ຈຽງໄຄເຊັກ ໄດ້ເວົ້າວ່າ ອີງຕາມຄວາມເຫັນຂອງເຂົາ ອິນດູຈີນ "ຍັງບໍ່ທັນຕຽມພ້ອມທີ່ຈະປົກຄອງຕົນເອງ" ໄດ້ເທື່ອ, ແລະ ເຂົາຍັງເຣັດຕິທຳທ່າໃຫ້ພວກຄົນເຂົ້າໃຈວ່າ ຈູງແຊັງ ສາມາດແບກຫາບພາລະບົດບາດເປັນຜູ້ສ້າງຄວາມເປັນລະບຽບ ຮຽບຮ້ອຍ" ຢູ່ບ່ອນນີ້ ໃນກໍລະນີທີ່ຍີ່ປຸ່ນປະລາໄຊ. ໃນວາລະເປີດກອງປະຊຸມປົດສະດຳ ອັງກິດກັບ ອາເມລິກາຜູ້ເປັນພັນທະມິດກັນ ໄດ້ເຫັນດີນຳກັນວ່າ ຢູ່ຫວຽດນາມນັ້ນ ກອງທັບອັງກິດຈະປົດອາວຸດກອງທັບຍີ່ປຸ່ນ ແຕ່ເສັ້ນຂະໜານທີ ໑໖ ລົງໄປ ທາງພາກໃຕ້,ສ່ວນແຕ່ເສັ້ນຂະໜານທີ ໑໖ ຂຶ້ນໄປພາກເໜືອນັ້ນ ການປົດອາວຸດກອງທັບຍີ່ປຸ່ນຈະເປັນພາລະຂອງທະຫານຈຽງໄຄເຊັກ. ຝະລັ່ງຖືກປັດເຂ່ຍອອກຈາກການກະທຳດັ່ງກ່າວ, ສ່ວນຄວາມຄິດຄວາມເຫັນຂອງກະໂຕຫວຽດນາມເອງ ແນ່ນອນວ່າບໍ່ໄດ້ເອົາໃຈໃສ່ເລີຍ.

ພ້ອມດຽວກັນ ນາຍເກົ່າຂອງອິນດູຈີນ ກໍບໍ່ຍອມໃຫ້ເສຍເວລາເປົ່າໆ. ກອງທັບຈຽງໄຄເຊັກ ຍັງບໍ່ທັນຜ່ານຊາຍແດນຫວຽດນາມ ແຕ່ໄດ້ມີນາຍທະຫານຝະລັ່ງຫລາຍຄົນທີ່ປະກົດຕົວຢູ່ຮ່າໂນ້ຍ ພວກເຂົາພັກເຊົາຢູ່ທີ່ໂຮງແຮມທີ່ທັນສະໄໝທີ່ສຸດ ຂອງນະຄອນຫລວງຄື ໂຮງແຮມ "ເມຕະໂຣໂປນ", ນາຍທະຫານຝະລັ່ງໄດ້ມາຈາກຈີນ,ສີລັງກາ, ມາດາກັດສະກາ ໝາຍຄວາມວ່າ ມາຈາກທຸກແຫ່ງຕາມຄຳສັ່ງຂອງ ເດີໂກນ ທີ່ໄດ້ປະກາດອອກໃນມື້ທີ່ທະຫານຍີ່ປຸ່ນຍອມຈຳນົນວ່າໃຫ້ຊອກຫາທຸກວິທີທາງໄປຮອດອິນດູຈີນເພື່ອກະກຽມພື້ນຖານໃຫ້ແກ່ການແກ້ແຄ້ນ ແລະ ຍຶດເອົາທີ່ຕັ້ງຂອງຝະລັ່ງຄືນອີກ.

ດັ່ງນັ້ນ ສະພາບການຈຶ່ງຮຽກຮ້ອງໃຫ້ພັກ ແລະ ຄະນະກຳມະການ ແຫ່ງຊາດເພື່ອປົດປ່ອຍຫວຽດນາມ ຕ້ອງມີການກະທຳອັນຮີບດ່ວນ ແລະ ເດັດດ່ຽວ. ຢູ່ເຮືອນຕຶກທີ່ຕັ້ງຢູ່ຖະໜົນຮ່າງງານ ໄດ້ດຳເນີນກອງປະຊຸມຂອງຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ເປັນຄັ້ງທຳອິດ ຢູ່ຮ່າໂນ້ຍພາຍໃຕ້ການເປັນປະທານຂອງໂຮ່ຈີມິນ. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຕົກລົງວ່າ ຕ້ອງປະກາດລາຍຊື່ຂອງຄະນະລັດຖະບານປະຕິວັດຊົ່ວຄາວຢ່າງເປັນທາງການ ແລະ ຮີບດ່ວນ ແລະ ຈັດຕັ້ງພິທີປະຕິຍານຕົວຂອງລັດຖະບານນັ້ນ. ຫລາຍຄົນເນັ້ນວ່າ ຕ້ອງດຳເນີນວຽກດັ່ງກ່າວ ກ່ອນເວລາທີ່ກອງທັບໜ້າ ຂອງທະຫານຈຽງໄຄເຊັກ ຈະເຂົ້າຮ່າໂນ້ຍ. ກອງປະຊຸມຕົກລົງອອກຄຳສັ່ງ ໃຫ້ຄະນະກຳມະການປະຕິວັດຂອງບັນດາແຂວງພາກເໜືອ ໝູນໃຊ້ສະພາບນ້ຳຖ້ວມ ເພື່ອຊອກຫາທຸກວິທີທາງຖ່ວງດຶງກອງທັບໜ້າຂອງຈຽງໄຄເຊັກ. ກອງປະຊຸມຍັງຕົກລົງເອີ້ນເອົາກຳລັງທະຫານຫລວງຂອງກອງທັບປົດປ່ອຍ ມາຍັງຮ່າໂນ້ຍຢ່າງຮີບດ່ວນ ເພາະວ່າ

ບັນດາກຳລັງປະກອບອາວຸດປະຕິວັດ ຢູ່ນະຄອນຫລວງມີແຕ່ກອງທະຫານລາດກອງຫລອນນ້ອຍໆຈຳນວນຫນຶ່ງ ແລະ ມີພົນທະຫານບາງກຸ່ມຂອງບັກກີ່ ທີ່ໄປນຳການປະຕິວັດ.

ເຊົ້າວັນທີ ໒໖ ເດືອນສິງຫາ ທະຫານປົດປ່ອຍສອງກອງພັນຊຸດທຳອິດ ໄດ້ມາຮອດເມືອງ ຢາເລີມ ຊານເມືອງຂອງນະຄອນຫລວງຮ່າໂນ້ຍ. ກອງທະຫານຍ່າງຢ່າງສະຫງ່າອົງອາດຜ່ານຂົວລອງບຽນຍາວກວ່າ ໒ ກິໂລແມັດ ທີ່ເນັ່ງຂ້າມແມ່ນ້ຳແດງ. ນັກຮົບຍ່າງສອງແຖວຈັບປືນກາຣາບິນ ຢູ່ໃນທ່າຕຽມພ້ອມສູ້ຮົບ. ຊາວຮ່າໂນ້ຍຄຳນັບ ຮັບຕ້ອນນັກຮົບປະຕິວັດດ້ວຍຄວາມເບີກບານມ່ວນຊື່ນທີ່ສຸດ. ຢູ່ເທິງສະຫນາມ ໂຮງລະຄອນ ຊາວຮ່າໂນ້ຍເປັນສິບໆພັນຄົນ ໄດ້ຊົມການເດີນສວນສະຫນາມອັນງາມຕາທີ່ສຸດ. ດຽວນີ້ ລັດຖະບານປະຕິວັດຊົ່ວຄາວມີພະນັກງານທີ່ເດັດດ່ຽວຫນຽວແຫນ້ນ, ມີລະດັບການເມືອງສູງ ແລະ ໄດ້ຜ່ານໂຮງຮຽນອັນເຕັມໄປດ້ວຍຄວາມຍາກລຳບາກ ຂອງສົງຄາມກອງຫລອນ. ພະນັກງານດັ່ງກ່າວມີປະໂຫຍດໃຫຍ່ຫລວງສຳລັບການຈັດຕັ້ງ ແລະ ການປົກປັກຮັກສາອົງການສູນກາງຂອງອຳນາດປົກຄອງປະຕິວັດ.

ວັນທີ ໒໘ ເດືອນສິງຫາ ຫນັງສືພິມຮ່າໂນ້ຍໄດ້ລົງພິມຖະແຫລງການ ກ່ຽວກັບການສ້າງຕັ້ງລັດຖະບານປະຕິວັດຊົ່ວຄາວ ບົນພື້ນຖານຄະນະກຳມະການແຫ່ງຊາດ ເພື່ອປົດປ່ອຍຫວຽດນາມ ໂດຍອີງຕາມການຕົກລົງຂອງກອງປະຊຸມໃຫຍ່ຂອງບັນດາຜູ້ແທນປະຊາຊົນທີ່ປະຊຸມຢູ່ເຕີນຈາວ. ໂຮ່ຈີມິນ ຖືກແຕ່ງຕັ້ງເປັນຫົວຫນ້າລັດຖະບານ ແລະທັງເປັນລັດຖະມົນຕີກະຊວງການຕ່າງປະເທດ. ນັບຕັ້ງແຕ່ມື້ທຳອິດທີ່ການປະຕິວັດ ໄດ້ຮັບໄຊຊະນະ ປະຊາຊົນໄດ້ເອີ້ນເພິ່ນວ່າປະທານ.

ຢູ່ທີ່ກອງປະຊຸມຂອງຄະນະກຳມະການແຫ່ງຊາດເພື່ອປົດປ່ອຍຫວຽດນາມ ໄດ້ມີການປຶກສາຫາລືບັນຫາກ່ຽວກັບສ່ວນປະກອບ ຂອງລັດຖະບານ. ໂຮ່ຈີມິນສະເຫນີວ່າຕ້ອງປະກາດຢ່າງເປັນທາງການ ໃຫ້ປະຊາຊົນຮູ້ເຖິງນະໂຍບາຍສ້າງພັນທະພາບແຫ່ງຊາດອັນກວ້າງຂວາງຂອງຫວຽດມິນ ແລະ ຮຽກຮ້ອງໄປຍັງຜູ້ຕາງຫນ້າພັກຝ່າຍຮັກຊາດ, ນັກເຄື່ອນໄຫວທີ່ບໍ່ສັງກັດພັກຝ່າຍ ແລະ ທີ່ຍັງບໍ່ໄດ້ເຂົ້າຮ່ວມກັບຫວຽດມິນ ຈົ່ງປະກອບສ່ວນເຂົ້າໃນລັດຖະບານໃຫມ່. ມາຕະການດັ່ງກ່າວທີ່ເກີດຈາກຄວາມຈຳເປັນ ຕ້ອງເປີດກວ້າງພື້ນຖານທາງດ້ານສັງຄົມ-ການເມືອງຂອງລັດຖະບານ ເຊິ່ງນັກຫນັງສືພິມ ຂອງພວກນາຍທຶນເອີ້ນວ່າ ເປັນລັດຖະບານແບບກອມມູນິດນັ້ນ ໄດ້ຮັບຄວາມເຫັນດີເປັນພ້ອມຢູ່ໃນວົງການການເມືອງ. ຢູ່ໃນກອງປະຊຸມນີ້ເອງ, ທີ່ຜູ້ແທນໄດ້ມອບຫມາຍຫນ້າທີ່ ໃຫ້

ໂຮ່ຈີມິນ ເປັນຜູ້ກະກຽມຮ່າງຖະແຫລງການ ກ່ຽວກັບໄຊຊະນະຂອງການປະຕິວັດ ແລະ ປະກາດຫວຽດນາມເປັນສາທາລະນະລັດປະຊາທິປະໄຕ.

ໂຮ່ຈີມິນເອົາເວລາເກືອບວ່າຕະຫລອດມື້ຕະຫລອດຄືນ ເພື່ອສຸມໃສ່ຂຽນຮ່າງຖະແຫລງການຢູ່ໃນຫ້ອງນ້ອຍໆທີ່ຂາດແສງສະຫວ່າງ ໃນເຮືອນຫລັງຫນຶ່ງທີ່ຕັ້ງຢູ່ ຖະຫນົນ–ຮ່າງວາງ. ຄົນທີ່ອາໄສຢູ່ໃນເຮືອນດັ່ງກ່າວ ແລະ ຄົນທີ່ຢູ່ອ້ອມແອ້ມຕ່າງກໍຊຸກຖາມກັນ: ພໍ່ເຖົ້າຜູ້ມີດວງຕາໃສ, ຫົ່ມເສື້ອສີຫມາກກະເບົາທີ່ຕາຍສີແລ້ວ, ບຸດຫນຶ່ງຕີພິມດີດ, ບຸດຫນຶ່ງກໍ່ສູບຢາຫມົດກອກນີ້ ຕໍ່ໃສ່ກອກໃຫມ່ຢ່າງງຽບຄົນນີ້ ລາວເຮັດຫຍັງແທ້. ບໍ່ມີໃຜຈັກຄົນທີ່ຄາດຄິດວ່າເຂົາເຈົ້າພວມເປັນສັກຂີພິຍານ ໃຫ້ແກ່ນາທີແຫ່ງປະຫວັດສາດ.

ເມື່ອຮ່າງຖະແຫລງການໄດ້ຂຽນສຳເລັດຮຽບຮ້ອຍແລ້ວ, ໂຮ່ຈີມິນ ກໍ່ເຊີນສະ–ຫາຍໃນຄະນະປະຈຳຄະນະບໍລິຫານງານສູນກາງມາປະກອບຄຳເຫັນ. ຄວາມດີໃຈ ຈົນຫາອັນປຽບບໍ່ໄດ້ ຊຶ່ງປະກົດອອກຢູ່ບົນໃບຫນ້າທີ່ຍັງມີສີຫລາເຫລືອງຂອງເພິ່ນ ພາຍຫລັງຈາກລົ້ມເຈັບຫນັກໃນເວລາຜ່ານມາ. ຄືດັ່ງກະໂຕເພິ່ນເອງໄດ້ເລົ່າໃນເວລາ ຕໍ່ມາວ່າ ໃນຊີວິດຕົນ ບໍ່ເຄີຍມີຄວາມຮູ້ສຶກຕື້ນຕັນໃຈ ກໍ່ຄືຟົດຟື້ນດີໃນເວລານາທີດັ່ງກ່າວ,ຍອມວ່າເພິ່ນຈະຕ້ອງຖະແຫລງໃຫ້ເພື່ອນຮ່ວມຊາດຕົນ ແລະ ໃຫ້ທົ່ວໂລກຮູ້ວ່າ ຜ່ານຈາກການຕໍ່ສູ້ອັນຍາວນານແບບບໍ່ຮູ້ອິດຮູ້ເມື່ອຍ ແລະ ບໍ່ຮູ້ວ່າໄດ້ສູນເສຍລູກສາວ ແລະ ລູກຊາຍ ຜູ້ປະເສີດໄປເທົ່າໃດແລ້ວນັ້ນ ປະຊາຊົນຫວຽດນາມ ຈຶ່ງບັນລຸເປົ້າຫມາຍອັນສັກກາລະ ບູຊາຂອງຕົນ.

ຄຳປະກາດເອກະລາດ ຊຶ່ງປະທານໂຮ່ຈີມິນ ເປັນຜູ້ແຕ່ງຂຶ້ນ ແລະ ຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນເປັນຜູ້ຮັບຮອງເອົານັ້ນ ໄດ້ສະແດງໃຫ້ເຫັນເຖິງເຈດຈຳນົງຂອງປະຊາຊົນ ແລະ ຊາວຜູ້ຮັກຊາດຫວຽດນາມເປັນລ້ານໆຄົນ ຄຳປະກາດດັ່ງກ່າວແມ່ນຫມາກຜົນແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານໃນໄລຍະ ໘໐ ປີ ເພື່ອປົດປ່ອຍຊາດຂອງປະຊາຊົນຫວຽດນາມ, ມັນຍັງສ່ອງແສງໃຫ້ເຫັນເຖິງຜົນສຳເລັດຂອງການປະຕິວັດເດືອນສິງຫາ ຊຶ່ງນຳເອົາອິດສະຫລະພາບ, ເອກະລາດ ແລະຄວາມເປັນເອກະພາບແຫ່ງຊາດມາໃຫ້ປະຊາຊົນຫວຽດນາມ. ນັກປະຫວັດສາດຫວຽດນາມ ຖືວ່າ: "ຄຳປະກາດເອກະລາດໄດ້ສັງລວມທຸກສິ່ງທຸກຢ່າງອັນມີຄ່າທີ່ມີຢູ່ໃນຜົນງານຂອງປະທານໂຮ່ຈີມິນ, ໃນເອກະສານຂອງພັກ ແລະ ໃນຖະແຫລງການຕ່າງໆຂອງນັກວິລະຊົນແຫ່ງຊາດ ແລະ ນັກປະຕິວັດ ຜູ້ທີ່ດີເດັ່ນ. ຄຳປະກາດເອກະລາດແມ່ນໂສມຫນ້າ ທີ່

ສະຫງ່າລາສີທີ່ສຸດ ໃນປະຫວັດສາດ ຂອງການຕໍ່ສູ້ອົງອາດກ້າແກ່ນ ແລະ ບໍ່ຍອມຈຳນົນຂອງປະຊາຊົນຫວຽດນາມ".

ໃນວິນາທີອັນສຳຄັນຍິ່ງດັ່ງກ່າວ ບັງເອີນມີຄົນຄິດເຖິງວຽກອັນໜຶ່ງ ທີ່ບໍ່ມີຄວາມສຳຄັນຫຍັງ ຄືວ່າມື້ອື່ນ ເວລາອອກປະກົດຕົວຢູ່ບົນເວທີຕໍ່ໜ້າປະຊາຊົນ ໂຮ່ຈີມິນ ບໍ່ມີໂສ້ງເສື້ອຫຍັງພໍສົມມາພາຄວນ. ສະນັ້ນຈຶ່ງຟ້າວຟັ່ງຊອກຫາຊຸດສາກົນໜຶ່ງຊຸດທີ່ເໝາະສົມກັບໂອກາດອັນເຄັ່ງຂຶມດັ່ງກ່າວ. ແຕ່ສຸດທ້າຍ ອີງຕາມຄຳຮຽກຮ້ອງຂອງເພິ່ນ ເຂົາເຈົ້າເລືອກເອົາໂສ້ງເສື້ອກາກີສີຂຽວອ່ອນຈືດໜຶ່ງຊຸດ ຊຶ່ງເປັນເຄື່ອງແບບເຄິ່ງທະຫານ ຊຶ່ງເພິ່ນມັກນຸ່ງແຕ່ຄາວຢູ່ກວາງເຈົາ. ນັບແຕ່ວັນນັ້ນມາ ຕະຫລອດ ໒໔ ປີທີ່ເພິ່ນ ເປັນປະທານປະເທດ, ໃນເວລາເຂົ້າຮ່ວມພິທີອັນສຳຄັນ, ຢູ່ໃນການພົບພໍ້ກັບແຂກ ມິດຕ່າງປະເທດ, ໃນການເດີນທາງພາຍໃນປະເທດ ຫລືໄປຕ່າງປະເທດ ເພິ່ນກໍນຸ່ງຫົ່ມຊຸດທຳມະດາດັ່ງກ່າວ ເກືອບວ່າຕະຫລອດເວລາ.

ໃນວັນທີ ໒ ເດືອນກັນຍາ ຮ່າໂນ້ຍຮຸ່ງເຮືອງຫລືອງເຫລື້ອມໄປດ້ວຍ ສີແດງຊຶ່ງເປັນສີຂອງການປະຕິວັດ. ທຸງເປັນພັນເປັນໝື່ນຜືນ ແຜ່ນປ້າຍໂຄມໄຟ ດອກໄມ້ທີ່ມີກິ່ນຫອມປະດັບປະດາຖະໜົນຫົນທາງ. ຢູ່ບ່ອນໃດກໍມີຄຳຂວັນເປັນພາສາຫວຽດແລະພາສາຝະລັ່ງວ່າ "ປະເທດຫວຽດນາມເປັນຂອງຄົນຫວຽດນາມ!", "ໂຄ່ນລົ້ມລະບອບລ່າເມືອງຂຶ້ນຝະລັ່ງ!", "ມີເອກະລາດຫລືຕາຍໄປ!", "ສະໜັບສະໜູນລັດຖະບານຊົ່ວຄາວ!", "ສະໜັບສະໜູນປະທານໂຮ່ຈີມິນ!", "ຍິນດີຕ້ອນຮັບຄະນະຜູ້ແທນຂອງປະເທດຜູ້ເປັນພັນທະມິດກັນ!".

ນັກຮົບຂອງທະຫານລາດກອງຫລອນອອກລາດຕະເວນຕາມຖະໜົນຫົນທາງບາງຄົນຖືຫລາວ, ບາງຄົນຖືງ້າວ, ນັບທັງຂວານ ແລະ ດາບບູຮານ ທີ່ເອົາມາຈາກວັດວາອາຣາມ. ຊາວນາຈາກໝູ່ບ້ານຢູ່ຊານເມືອງຮ່າໂນ້ຍ ເປັນພັນໆຄົນແຫ່ກັນເຂົ້າມາ ໃນເມືອງ. ໃນໝູ່ເຂົາເຈົ້າມີຜູ້ສາວຊາວນາແຕ່ງເຄື່ອງປະຈຳຊາດຢ່າງສວຍງາມ. ໃສ່ສາຍແອວຍາວ, ຫົ່ມເສື້ອຍາວຕ່າງຍາມ, ແພເຫລືອງຄຽນຫົວ. ຈຳນວນໜຶ່ງ ຖືພົ້ວດອກໄມ້ຈູມສີດໃສ. ໃນຖັນແຖວເດີນຂະບວນອັນຄຶກຄື້ນຢູ່ຄຽງຂ້າງປະຊາຊົນສາມັນ,ຍັງມີຄູບາ ແລະ ຊຸມພໍ່ຮ່ວມນຳດ້ວຍ.

ແສງຕາເວັນຂອງເດືອນກັນຍາ ສ່ອງລັດສະໝີຄວາມຮ້ອນລົງມາທີ່ສະໜາມຫຼວງ ທີ່ຕັ້ງຢູ່ໃຈກາງເມືອງ ຊຶ່ງໂຮ່ຈີມິນສະເໜີປ່ຽນຊື່ມາເປັນສະໜາມຫລວງ ບາດິງ ອັນເປັນຊື່ເອີ້ນສາມບ້ານຂອງແຂວງແທັງຮວາ ແລະ ເປັນບ່ອນທີ່ໃນສະຕະວັດກ່ອນ ພວກກອງຫລອນຊາວນາໄດ້ສູ້ຮົບຢ່າງອາດຫານຕ້ານພວກລ່າເມືອງຂຶ້ນ. ຊາວເມືອງ ຫລາຍກ່ວາເຄິ່ງລ້ານຄົນມາເຕົ້າໂຮມກັນຢູ່ສະໜາມຫລວງ ແລະ ຢູ່ຕາມທ້ອງຖະໜົນ ໃກ້ບໍລິເວນດັ່ງກ່າວ ເພື່ອວ່າຈະແນມເຫັນ ແລະ ໄດ້ຟັງສຽງເວົ້າຂອງຜູ້ນຳປະເທດ ຫວຽດນາມໃໝ່. ໃນຊ່ວງໄລຍະອັນສັ້ນໆ ຊື່ສຽງຂອງໂຮ່ຈີມິນ ໄດ້ແຜ່ລາມໄປທົ່ວປະເທດ . ຕອນເຊົ້າມື້ລຸນມາ ໜັງສືພິມຣ່າໂບ້ຍ ໄດ້ພັນລະນາການໂຮມຊຸມນຸມມິດຕິງ ທີ່ສະໜາມຫລວງບາດິງ ດັ່ງຕໍ່ໄປນີ້:

"ປະຊາຊົນຄອງຄອຍຕ້ອນຮັບປະທານ. ປະຊາຊົນຢາກເຫັນດ້ວຍຕາຕົນເອງຄົນຜູ້ໜຶ່ງຊຶ່ງປ່ຽນຊື່ຮອດໜຶ່ງຮ້ອຍເທື່ອ, ເປັນຄົນທີ່ເຣັດວຽກໄດ້ທັງ ໑໘ ອາຊີບ, ເຂົ້າຄຸກຕິດຕະລາງຫລາຍຄັ້ງ, ຖືກຕັດສິນປະຫານຊີວິດ ແລະ ໄດ້ມີຄົນທຳພິທີໄວ້ອາໄລ ທັງທີ່ເພິ່ນຍັງມີຊີວິດຢູ່. ປະຊາຊົນບໍ່ພຽງແຕ່ຢາກເຫັນທ່ານປະທານຄົນທຳອິດ ຂອງປະເທດສາທາລະນະລັດໃໝ່ດ້ວຍຕາຕົນເອງ, ແຕ່ຍັງຢາກເຫັນປະທານຄົນທຳອິດທີ່ຕ່າງກັບຄົນທຳມະດາດ້ວຍຕາຕົນເອງ.

ເມື່ອຄອງຄອຍດ້ວຍຈິດໃຈຮ້ອນຮົນ ມີຫລາຍຄົນຄິດວ່າ ແນ່ນອນປະທານ ຈະບໍ່ຄືເຈົ້າຟ້າມະຫາກະສັດໃນປາງກ່ອນ ທີ່ຫົ່ມເສື້ອເຈົ້າຊີວິດ ໃສ່ສາຍແອວຝັງເພັດ,ແຕ່ເພິ່ນຕ້ອງນຸ່ງຫົ່ມຮຽບຮ້ອຍ ເປັນຄົນໄປຖືກປ່ອງລ່ອງຖືກແລວ ເວົ້າຈາພາທີສຸພາບອ່ອນໂຍນ.

ເມື່ອປະທານອອກມາປະກົດຕົວຢູ່ເທິງເວທີແລ້ວ ໃຜໆກໍລ້ວນແຕ່ເຫັນວ່າ ເພິ່ນເປັນຄົນທຳມະດາ ມີຮອຍຍິ້ມທີ່ເອື້ອເຟື້ອເພື່ອແຜ່, ເພິ່ນໃສ່ໝວກສີເຫລືອງຈືດພໍໄດ້ກັ້ງແດດຮ້ອນ ນຸ່ງໂສ້ງເສື້ອສີກາກີທຳມະດາ ແລະ ໃສ່ເກີບຕີນລົດ.

ເມື່ອປະທານເລີ່ມອ່ານ "ຄຳປະກາດເອກະລາດ" ສຽງຂອງເພິ່ນ ເຂັ້ມແຂງເຣັດໃຫ້ທຸກຄົນຄິດເຖິງຂັ້ນຮົບປະຈັນບານຂອງກອງຫລອນ ໃນປ່າເລິກດົງດິບ:

"ຝະລັ່ງແຕກໜີ, ຍີ່ປຸ່ນຍອມຈຳນົນ, ເຈົ້າຊີວິດ ບາວດາຍ ສະຫລະລາຊະສົມບັດ. ປະຊາຊົນເຮົາໄດ້ທັບມ້າງຕ່ອງໂສ້ລ່າເມືອງຂຶ້ນທີ່ມາເກືອບຕັ້ງເປັນ ໑໐໐ ປີ ເພື່ອກໍ່ສ້າງປະເທດຫວຽດນາມທີ່ມີເອກະລາດ.

...ພວກຂ້າພະເຈົ້າຜູ້ເປັນສະມາຊິກຂອງລັດຖະບານຊົ່ວຄາວ ຂອງປະເທດ

ຫວຽດນາມໃໝ່, ເຊິ່ງເປັນຕົວແທນໃຫ້ແກ່ປະຊາຊົນຫວຽດນາມທົ່ວຊາດຂໍຖະແຫລງວ່າ ນັບແຕ່ດຽວນີ້ໄປ ພວກຂ້າພະເຈົ້າໄດ້ຕັດສາຍພົວພັນກັບຝະລັ່ງຢ່າງສິ້ນເຊີງ, ຂໍປະກາດ ວ່າ ສົນທິສັນຍາທີ່ຝະລັ່ງໄດ້ເຊັນກັບປະເທດຫວຽດນາມເປັນໂມຄະ, ລົບລ້າງທຸກອະພິ ສິດຂອງຝະລັ່ງຢູ່ເທິງດິນແດນຫວຽດນາມ...

ພວກຂ້າພະເຈົ້າເຊື່ອວ່າ ບັນດາປະເທດຜູ້ເປັນພັນທະມິດກັນ ທີ່ໄດ້ຮັບຮູ້ ຫລັກ ການແຫ່ງຄວາມສະເໝີພາບຂອງປະຊາຊາດຕ່າງໆ ຢູ່ໃນກອງປະຊຸມເຕເຮລານ ແລະ ຊານຟະຣານຊິດສະໂກນັ້ນ ຄົງບໍ່ອາດປະຕິເສດສິດໃນການມີເອກະລາດ ຂອງປະຊາຊົນ ຫວຽດນາມ.

ປະຊາຊົນທີ່ໄດ້ຕໍ່ສູ້ຢ່າງດຸເດືອດຊຽວຊານ ຕ້ານກັບແອກຂ້າທາດຂອງຝະລັ່ງ ມາ ກວ່າ ໘໐ ປີ, ປະຊາຊົນທີ່ສູ້ລົບຢ່າງອາດຫານ ຢູ່ໃນຖັນແຖວຂອງຝ່າຍພັນທະມິດ ຕ້ານ ຟາດຊິດ ໃນຫລາຍປີມານີ້ ປະຊາຊົນນັ້ນມີສິດເປັນປະຊາຊົນທີ່ມີອິດສະຫລະ ! ປະຊາ ຊົນນັ້ນຕ້ອງມີເອກະລາດ !

ດ້ວຍເຫດຜົນຂ້າງເທິງນີ້ ພວກຂ້າພະເຈົ້າ ລັດຖະບານຊົ່ວຄາວຂອງປະເທດສາ ທາລະນະລັດປະຊາທິປະໄຕຫວຽດນາມ ຂໍປະກາດຢ່າງໜັກແໜ້ນຕໍ່ໂລກວ່າ:

ປະເທດຫວຽດນາມມີສິດເປັນປະເທດທີ່ມີອິດສະຫລະພາບ ແລະ ເອກະລາດ, ໃນຕົວຈິງໄດ້ກາຍເປັນປະເທດໜຶ່ງທີ່ມີເອກະລາດ, ອິດສະຫລະພາບ. ທຸກຊົນຊາດຊົນ ເຜົ່າຫວຽດນາມ ເດັດດ່ຽວອຸທິດກຳລັງວັດຖຸ ແລະ ຈິດໃຈຂອງຕົນ, ເສຍສະຫລະຊີວິດ ແລະ ຊັບສິນເພື່ອປົກປັກຮັກສາຢ່າງໝັ້ນທ່ຽງແໜ້ນສິດໃນການມີເອກະລາດ, ອິດສະຫລະ ພາບດັ່ງກ່າວ".

ທັນໃດນັ້ນ ປະທານຢຸດກ່າວປາໄສ ແລະ ຫັນໜ້າໄປກໍ້າສະໜາມຫລວງ ຊຶ່ງ ກຳລັງມີສຽງຕົບມືກອງສະນັ່ນ ເພິ່ນຖາມວ່າ:

"ບັນດາເພື່ອນຮ່ວມຊາດທັງຫລາຍ ! ໄດ້ຍິນຂ້າພະເຈົ້າດີບໍ່ ? ຂ້າພະເຈົ້າ ເວົ້າແຈ້ງບໍ່ ?"

ຄຳຖາມງ່າຍດາຍດັ່ງກ່າວ ໄດ້ທຳລາຍທຸກຢ່າງ ຊຶ່ງຍັງຫ່າງກັນລະຫວ່າງ ປະ ທານ ແລະ ປະຊາຊົນ. ໝົດທຸກຄົນເກີດຄວາມຮັກແພງ ແລະ ເຄົາລົບນັບຖືຕໍ່ປະທານ ຢ່າງບໍ່ມີຂອບເຂດໃນທັນທີທັນໃດໂລດ. ໝົດທຸກຄົນມອງເຫັນວ່າ ປະທານເປັນຄົນໜຶ່ງ ຄືເຂົາເຈົ້າ ສະໜິດສະໜົມກັບເຂົາເຈົ້າ, ເປັນຄົນໜຶ່ງທີ່ມີນ້ຳໃຈເອື້ອເຟື້ອ ຢ່າງບໍ່ມີ

ຂອບເຂດກັບປະຊາຊົນ ແລະ ໝົດທຸກຄົນພ້ອມກັນຕອບເປັນສຽງດຽວຕໍ່ຄຳຖາມຂອງປະທານວ່າ: "ແຈ້ງດີ ! ".

ໄຊຊະນະຂອງການປະຕິວັດເດືອນສິງຫາປີ ໑໙໔໕ ທີ່ນຳໄປເຖິງ ການສ້າງຕັ້ງລັດກຳມະກອນ ແລະ ຊາວນາລັດທຳອິດ ຢູ່ອາຊີອາຄະເນນັ້ນ, ໄດ້ໄຂສັງກາດ ໃໝ່ຂອງປະຫວັດສາດໃຫ້ແກ່ປະຊາຊົນຫວຽດນາມ. ການປະຕິວັດເດືອນສິງຫາ ທີ່ມີລັກສະນະຊາດ ປະຊາທິປະໄຕປະຊາຊົນ ເປັນຜູ້ເຮັດໃຫ້ການຕໍ່ສູ້ເກືອບໜຶ່ງສະຕະວັດຂອງປະຊາຊົນຫວຽດນາມ ຕ້ານລັດທິລ່າເມືອງຂຶ້ນສຳເລັດລົງ, ທັງເປັນຂີດໝາຍແຫ່ງການພັງທະລາຍຂອງລະບົບລ່າເມືອງຂຶ້ນຂອງຈັກກະພັດຢູ່ອາຊີອາຄະເນ. ການປະຕິວັດ ເດືອນສິງຫາໄດ້ຖືກບັນທຶກໄວ້ຢູ່ໃນປະຫວັດສາດຂອງຂະບວນການປະຕິວັດໂລກຢ່າງສົມເຫດສົມຜົນ ໃນຖານະທີ່ມັນເປັນແບບຢ່າງອັນດີເລີດ ດ້ານສິລະປະປະຕິວັດ ແລະ ທິດສະດີປະດິດສ້າງປະຕິວັດຂອງມະຫາຊົນ ຊຶ່ງມີພັກມາກຊິດ-ເລນິນິດເປັນຜູ້ນຳພາ. ປະທານໂຮ່ຈີມິນ ໜຶ່ງໃນບັນດາຜູ້ຈັດຕັ້ງ ແລະ ປຸກລະດົມການປະຕິວັດເດືອນສິງຫາອັນມີໄຊໄດ້ຂຽນບາງຂໍ້ຄວາມ ໃນເວລາຕໍ່ໆມາວ່າ:

"ໄຊຊະນະຂອງການປະຕິວັດເດືອນສິງຫາ ຢູ່ຫວຽດນາມ ໄດ້ຢັ້ງຢືນໃຫ້ເຫັນອີກເທື່ອໜຶ່ງ ເຖິງຄວາມຖືກຕ້ອງຂອງທິດສະດີມາກ-ເລນິນ ກ່ຽວກັບບັນຫາຊົນຊາດ ແລະ ເມືອງຂຶ້ນ, ກໍຄືຄວາມຖືກຕ້ອງຂອງແນວທາງ ຊຶ່ງການປະຕິວັດສັງຄົມນິຍົມເດືອນຕຸລາປີ ໑໙໑໗ ໄດ້ບຸກເບີກແລ້ວ. ໄຊຊະນະຂອງການປະຕິວັດເດືອນສິງຫາ ໄດ້ຢືນຢັນວ່າເພື່ອຈະຍາດເອົາໄຊຊະນະ ການປະຕິວັດຊາດຕ້ອງ:

- ອີງໃສ່ແນວໂຮມແຫ່ງຊາດອັນກວ້າງຂວາງ ຕ້ານລັດທິຈັກກະພັດ;
- ແກ້ໄຂບັນຫາຊາວນາ;
- ມີກອງທັບປະຊາຊົນ;
- ຍາດແຍ່ງເອົາການຊ່ວຍເຫຼືອຖານອ້າຍນ້ອງຈາກປະຊາຊົນ ແລະ ຊົນຊັ້ນກຳມາຊີບຂອງບັນດາປະເທດອື່ນໆ;

ດຳເນີນໄປໂດຍມີພັກຂອງຊົນຊັ້ນກຳມະກອນເປັນຜູ້ນຳພາ...

ບໍ່ສະເພາະແຕ່ຊາວຜູ້ອອກແຮງງານ ແລະ ປະຊາຊົນຫວຽດນາມເທົ່ານັ້ນ ແຕ່

ຫາກຍັງນັບທັງຊາວຜູ້ອອກແຮງງານ ແລະ ຜູ້ຄົນທີ່ຖືກກົດຂີ່ຢູ່ປະເທດອື່ນໆ ກໍລ້ວນແຕ່ສາມາດເອກອ້າງໄດ້ວ່າເປັນເທື່ອທຳອິດ ໃນປະຫວັດສາດປະຕິວັດ ຂອງບັນດາປະຊາຊາດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ ທີ່ພັກໜຶ່ງ ຊຶ່ງຫາກໍມີອາຍຸ ໑໘ ປີເທົ່ານັ້ນ ໄດ້ນຳພາການປະຕິວັດຈີນໄດ້ຮັບຜົນສຳເລັດ ແລະ ໄດ້ກຳອຳນາດທົ່ວປະເທດ. ໄຊຊະນະຂອງການປະຕິວັດເດືອນສິງຫາແມ່ນໄຊຊະນະຂອງທິດສະດີມາກ-ເລນິນ ຢູ່ໃນການປະຕິວັດປົດປ່ອຍຊາດຄັ້ງທຳອິດ ໃນປະເທດເມືອງຂຶ້ນ".

ໂຮ່ຈີມິນ ໄດ້ເນັ້ນໜັກກ່ຽວກັບການປະກອບສ່ວນອັນລ້ຳຄ່າ ຂອງການປະຕິວັດເດືອນຕຸລາໂຊວຽດ ເຂົ້າໃນໄຊຊະນະຂອງການປະຕິວັດເດືອນສິງຫາຢູ່ເລື້ອຍໆ. ເພິ່ນຂຽນວ່າ: "ທວນໄຟຂອງທິດສະດີມາກ-ເລນິນ ແລະ ບົດຮຽນຂອງການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່ ເຍືອງທາງໃຫ້ການປະຕິວັດຫວຽດນາມ...ປະຊາຊົນຫວຽດນາມ ຍາມໃດກໍ້ຮູ້ບຸນຄຸນສະຫະພາບໂຊວຽດ ຜູ້ທີ່ບໍ່ພຽງແຕ່ຕີຊະນະພວກຟາດຊິດຢູ່ເບີລິນ ອາຊີ ແຕ່ຫາກຍັງປະກອບສ່ວນອັນຕັດສິນ ເຂົ້າໃນການກູ້ເອົາມະນຸດຊາດ ໃຫ້ຫລຸດພົ້ນ ຈາກແອກຂ້າທາດຂອງລັດທິຟາດຊິດ. ໄຊຊະນະຂອງໂຊວຽດໄດ້ປະກອບສ່ວນໃຫ້ແກ່ ໄຊຊະນະຂອງການປະຕິວັດເດືອນສິງຫາ ຢູ່ປະເທດພວກຂ້າພະເຈົ້າ".

ບາດກ້າວເດີນທຳອິດຂອງສາທາລະນະລັດ

ໂຮ່ຈິມິນ ແມ່ນສັນຍາລັກແຫ່ງຄວາມສະຫລາດສ່ອງໃສແບບກອມມູນິດຢູ່ອາຊີ

ຣ. ອາຣິດສະມັງດີ

໑

ພາຍຫລັງໄຊຊະນະຂອງການປະຕິວັດເດືອນສິງຫາ ແລະ ຫລັງຈາກທີ່ສາທາລະນະລັດປະຊາທິປະໄຕຫວຽດນາມກຳເນີດຂຶ້ນແລ້ວ ໂຮ່ຈິມິນ ແລະ ເພື່ອນຮ່ວມຮົບ ຂອງເພິ່ນ ໄດ້ພົບຂໍ້ຫຍຸ້ງຍາກໃຫຍ່ຫລວງນາໆປະການ ຊຶ່ງເບິ່ງວ່າຈະບໍ່ສາມາດຜ່ານຜ່າໄດ້. ເນື່ອງຈາກຫລາຍປີ ທີ່ຕົກຢູ່ໃຕ້ແອກຢຶດຄອງຂອງພວກຂຸນເສິກຍີ່ປຸ່ນນັ້ນ ເສດຖະກິດ ທີ່ຫລ້າຫລັງຢູ່ແລ້ວ ຊ້ຳພັດຕົກຢູ່ໃນສະພາບບໍ່ມີລະບົບລະບຽບ ແລະ ຫລົ້ມຈົມຢ່າງສຸດຂີດ. ໄພອຶດຫິວ ແລະ ພະຍາດໂລຄາ ກໍຍັງສືບຕໍ່ທຳລາຍປະຊາຊົນຢ່າງເປັນຂະບວນ. ສາທາລະນະລັດຜູ້ໜຸ່ມນ້ອຍ ຖືກສັດຕູນອກປະເທດຂົ່ມຂູ່ ຈົນນັບບໍ່ຖ້ວນ.ຣັກສາອຳນາດໄວ້, ຖ້ອຍຄຳດັ່ງກ່າວໄດ້ກາຍເປັນຄຳຂວັນສຳຄັນປະຈຳວັນ ກາຍເປັນບັນຫາເປັນຕາຍຂອງການປະຕິວັດຫວຽດນາມ. ໃນເວລາຍາກໄຮ້ດັ່ງກ່າວ, ຄຸນສົມບັດອັນສູງສົ່ງຂອງບຸກຄົນທີ່ເປັນຜູ້ນຳ ແລະ ຜູ້ຈັດຕັ້ງມະຫາຊົນ ຊຶ່ງເປັນລັກສະນະສະເພາະຂອງປະທານໂຮ່ຈິມິນໄດ້ຊໍ່ສະແດງອອກຢ່າງເຕັມທີ່. ດ້ວຍຄວາມຫຸ່ມຫ່ຽງທີ່ຫາຍາກ ແລະ ຄວາມຄ່ອງແຄ້ວ

ທາງຍຸດໂທບາຍ ເພິ່ນເປັນນາຍທ້າຍທີ່ບັນຊາເຮືອຂອງປະເທດຊາດ ຜ່ານຜ່າແກ້ງຕາດອັນຕະລາຍທີ່ສຸດ ມາບໍ່ຈັກວ່າເທົ່າໃດແລ້ວ. ເພິ່ນຖ່າຍທອດເອົາ ບົດຮຽນອັນລ້ຳຄ່າຂອງເລນິນມາໃຊ້ ໃນວຽກງານຂອງເພິ່ນຢູ່ສະເໝີໆ, ໂດຍອີງໃສ່ບົດຮຽນດັ່ງກ່າວ ເພິ່ນໄດ້ຊອກຫາ ແລະ ຊອກພົບຄຳຕອບ ຕໍ່ຫລາຍບັນຫາທີ່ຕັ້ງຂຶ້ນ. ໃນເວລານັ້ນ ເພິ່ນທວນຄືນໃຫ້ໝູ່ເພື່ອນແລະ ເພື່ອນຮ່ວມຮົບຟັງຢູ່ເລື້ອຍໆ ກ່ຽວກັບຄຳເວົ້າ ອັນສະຫລາດສ່ອງໃສຂອງເລນິນທີ່ວ່າ: ຍາດເອົາອຳນາດມາໄດ້ ກໍ່ຍາກຢູ່ແລ້ວ ແຕ່ປົກປັກຮັກສາອຳນາດໄວ້ຍິ່ງຍາກກວ່າ.

ໃນມື້ຕໍ່ມາ ຫລັງຈາກທີ່ໄດ້ປະກາດສ້າງຕັ້ງສາທາລະນະລັດແລ້ວ, ຄະນະລັດຖະມົນຕີຂອງລັດຖະບານປະຕິວັດຊົ່ວຄາວ ໄດ້ໄຂກອງປະຊຸມສະໄໝທຳອິດ ຢູ່ຫ້ອງຮັບແຂກຂອງສຳນັກຜູ້ສຳເລັດລາຊະການໃນເມື່ອກ່ອນ ຢູ່ບັກໂບ. ເມື່ອໂຮ່ຈີມິນ ກ້າວເຂົ້າຫ້ອງປະຊຸມແລ້ວ ທຸກຄົນກໍ່ຄອງຖ້າເບິ່ງວ່າ ເພິ່ນຈະທັກທາຍສະມາຊິກລັດຖະບານຄືແນວໃດ: "ເພື່ອນຮ່ວມຊາດ", "ສະຫາຍ" ຫລື "ທ່ານ" ແຕ່ເພິ່ນພັດຍິ້ມແຍ້ມແຈ່ມໃສ ແລະ ເວົ້າຢ່າງອ່ອນໂຍນວ່າ:

"ສະບາຍດີລຸງປ້າ ! ສະບາຍດີອ້າຍນ້ອງ !"

ຄຳເວົ້າທີ່ຕ່າງຈາກທຳມະດາດັ່ງກ່າວຂອງປະທານ ໄດ້ສ້າງບັນຍາກາດ ເປັນກັນເອງຂຶ້ນໃນທັນໃດ ຫລາຍກວ່າຄວາມເວົ້າອື່ນໆ ແລະ ໄດ້ສະແດງໃຫ້ທຸກຄົນ ເຫັນວ່າຍຸກໃໝ່ໄດ້ມາຮອດແລ້ວ.

ເຖິງແມ່ນວ່າຄຳປາໄສຂອງໂຮ່ຈີມິນບໍ່ຍາວກໍ່ຕາມ, ແຕ່ກໍ່ບັນຈຸດ້ວຍໂຄງການ ດຳເນີນງານ. ເພິ່ນເວົ້າສູ່ບັນດາລັດຖະມົນຕີຟັງວ່າ: "ໃນຊົ່ວໄລຍະແປດສິບປີ ປະຊາຊົນຂອງພວກເຮົາຖືກກົດຂີ່ຂູດຮີດ, ບໍ່ມີລະດັບວັດທະນະທຳ ແລະ ບໍ່ມີສິດໃດໆ ດ້ວຍເຫດນັ້ນ ຈຶ່ງບໍ່ແມ່ນເລື່ອງແປກປະຫລາດເລີຍທີ່ພວກສະຫາຍ ກໍ່ຄືຂ້າພະເຈົ້າເອງບໍ່ຮູ້ຈັກສິລະປະໃນການປົກຄອງລັດ ແຕ່ຢ່າງໃດ".

ແຕ່ບັນຫາດັ່ງກ່າວ ບໍ່ຄວນເປັນສິ່ງທີ່ເຮັດໃຫ້ພວກເຮົາກັງວົນ. ພວກເຮົາທັງເຮັດທັງຮຽນ ທັງຮຽນທັງເຮັດ. ແນ່ນອນວ່າບໍ່ອາດຫລີກລ່ຽງຄວາມຜິດພາດໄດ້ ແຕ່ພວກເຮົາຈະສະກັດກັ້ນຄວາມຜິດພາດ ທີ່ອາດຈະເກີດຂຶ້ນໄດ້, ພວກເຮົາ ມີຄວາມກ້າຫານພຽງພໍ ທີ່ຈະດັດແກ້ຄວາມຜິດພາດໄດ້. ຂ້າພະເຈົ້າເຊື່ອແນ່ວ່າ ພວກເຮົາຈະບັນລຸ ຜົນສຳເລັດໄດ້ ເພາະວ່າພວກເຮົາມີນ້ຳໃຈຮັກຊາດ ແລະ ຮັກປະຊາຊົນຢ່າງເລິກເຊິ່ງ.

ປະຈຸບັນ ມີບັນຫາຫຍັງແດ່ ທີ່ເປັນບັນຫາອັນຮີບດ່ວນກວ່າໝູ່. ບັນຫາທີໜຶ່ງ, ແມ່ນໄພອຶດຫິວ. ນັ້ນແມ່ນຜົນຮ້າຍອັນໜ້າຂົດຽດທີ່ສຸດ ທີ່ເກີດຈາກນະໂຍບາຍໂຫດຫ້ຽມ ຊຶ່ງພວກຝະລັ່ງກັບຍີ່ປຸ່ນໄດ້ດຳເນີນມາ. ປະຊາຊົນຫລາຍກວ່າສອງລ້ານຄົນ ໄດ້ອຶດເຂົ້າຕາຍມາແລ້ວ ສ່ວນຜູ້ຄົນທີ່ລອດຕາຍ ພວມພົບກັບຄວາມອຶດຫິວໃນເວລານີ້. ເຮັດແນວໃດ ຈຶ່ງຈະຊ່ວຍຊີວິດຂອງພວກເຂົາໄວ້ໄດ້. ຂ້າພະເຈົ້າສະເໜີເປີດບັ້ນຮົບ ເພື່ອເພີ່ມພູນພະລິດຜົນ. ຕ້ອງໃຊ້ດິນມາທັງໝົດທີ່ອາດປູກຝັງໄດ້ ເພື່ອປູກພືກຊະນິດຕ່າງໆ, ປູກມັນຕົ້ນ, ມັນດ້າງ, ສາລີ. ແຕ່ວ່າພວກເຮົາຕ້ອງລໍຖ້າ ໓-໔ ເດືອນ ກ່ອນຈະເກັບກ່ຽວຜົນລະປູກໃໝ່ ສະນັ້ນ ຂ້າພະເຈົ້າຈຶ່ງສະເໜີເປີດການເກນເຂົ້າ ໃນທັນທີທັນໃດ ໂລກ ເພື່ອສ້າງຄັງຊ່ວຍເຫລືອໃຫ້ແກ່ຜູ້ອຶດຫິວ. ຂ້າພະເຈົ້າຂໍສະເໜີອີກຕື່ມວ່າ ໃຫ້ເພື່ອນຮ່ວມຊາດທັງໝົດ, ສ່ວນຂ້າພະເຈົ້າຈະເປັນຜູ້ທຳອິດທີ່ອົດອາຫານໜຶ່ງຄາບ ໃນແຕ່ລະວັນ. ເຂົ້າທີ່ປະຢັດໄດ້ຈະທ້ອນໂຮມໄວ້ ແລ້ວເອົາໄປແຈກຢາຍໃຫ້ທຸກຄົນ.

ບັນຫາທີສອງ, ແມ່ນໄພບໍ່ຮູ້ໜັງສື. ໜຶ່ງໃນຈຳນວນແບບວິທີປ່າເຖື່ອນ ຊຶ່ງພວກລ່າເມືອງຂຶ້ນຝະລັ່ງໃຊ້ ເພື່ອຮັກສາອຳນາດການປົກຄອງໄວ້ ຢູ່ເໜືອປະຊາຊົນ ຂອງພວກເຮົາ ແມ່ນການເຮັດໃຫ້ປະຊາຊົນຕົກຢູ່ໃນສະພາບອະວິຊາ.

ປະຊາຊົນທີ່ບໍ່ຮູ້ໜັງສື ແມ່ນປະຊາຊົນທີ່ຫລ້າຫລັງ. ໃຊ້ເວລາພຽງແຕ່ສາມເດືອນ ເທົ່ານັ້ນກໍຈະສາມາດຮູ້ອ່ານ ຮູ້ຂຽນພາສາແມ່, ສະນັ້ນຂ້າພະເຈົ້າສະເໜີເປີດ ບັ້ນລົບລ້າງການກືກໜັງສື້ອນ ໃນໝູ່ມະຫາຊົນ.

ບັນຫາທີສາມ, ມີຄວາມຈຳເປັນຕ້ອງກະກຽມ ແລະ ດຳເນີນການເລືອກຕັ້ງ ທົ່ວໄປໃນກຳນົດເວລາໄວເທົ່າທີ່ຈະໄວໄດ້, ເຮັດແນວນັ້ນຈຶ່ງຈະຄ້ຳປະກັນ ໃຫ້ປະຊາຊົນມີສິດປະຊາທິປະໄຕ. ພົນລະເມືອງທຸກໆຄົນໃນປະເທດຂອງພວກເຮົາ ຕ້ອງມີສິດເລືອກຕັ້ງ ແລະ ຖືກເລືອກຕັ້ງ ໂດຍບໍ່ຈຳແນກຖານະທາງຊັບສົມບັດ, ການນັບຖື ຫລື ບໍ່ນັບຖືສາດສະໜາ, ເປັນຄົນຊົນຊາດໃດ ແລະ ອື່ນໆ...

ບັນຫາທີສີ່, ໂດຍຊອກວິທີທາງເຮັດໃຫ້ປະຊາຊົນຂອງພວກເຮົາ ຕົກຢູ່ໃນສະພາບໂງ່ຈ້າຫລ້າຫລັງ ພວກລ່າເມືອງຂຶ້ນໄດ້ເບື່ອເມົາປະຊາຊົນເຮົາດ້ວຍເຫລົ້າ ແລະ ຢາຝິ່ນ. ພວກເຂົາປູກຝັງຄວາມຊິນເຄີຍອັນຊົ່ວຮ້າຍ ແລະ ຄວາມຊົ່ວຊ້າລາມົກລົງ ໃນໝູ່ປະຊາຊົນ. ພວກເຮົາມີໜ້າທີ່ສ້າງຄົນໃໝ່ ທີ່ຮັກປະເທດຊາດຂອງເຂົາ. ຂ້າພະເຈົ້າຂໍສະເໜີເປີດບັ້ນຮົບສຶກສາອົບຮົມພົນລະເມືອງໃຫ້ມີແນວຄິດ ດຸໝັ່ນ ແລະ ປະຢັດ, ສັດ

ຊື່ ບໍລິສຸດ, ໃຫ້ກຳຈັດພົນຮ້າຍອັນໜ້າອັບອາຍຂອງສະໄໝອະດີດ ອອກຈາກຊີວິດຂອງພວກເຮົາຢ່າງໝົດກ້ຽງ.

ບັນຫາທີ່ຫ້າ, ຕ້ອງຍົກເລີກການເສຍພາສີສາມແບບທີ່ໜ້າອັບອາຍ ໃນທັນທີທັນໃດໂລດ ເຊິ່ງໄດ້ແກ່ພາສີສ່ວນບຸກຄົນ, ພາສີຕະຫລາດ, ພາສີຂ້າມແມ່ນ້ຳ. ຂ້າພະເຈົ້າຂໍສະເໜີໃຫ້ຫ້າມສູບຢາຝິ່ນຢ່າງເດັດຂາດ.

ບັນຫາທີ່ຫົກ, ຂ້າພະເຈົ້າຂໍສະເໜີປະກາດຢ່າງເປັນທາງການ ກ່ຽວກັບສິດ ໃນການນັບຖືສາດສະໜາ.

ພໍແຕ່ໃນເດືອນທຳອິດຂອງການປະຕິບັດໂຄງການການເມືອງ ຊຶ່ງໂຮ່ຈິມິນຍົກຂຶ້ນມານັ້ນ ກໍໄດ້ເກີດມີໝາກຜົນທີ່ປະຈັກຕາໄດ້ແລ້ວ. ມີປະຊາຊົນລ້ານໆຄົນຂານຕອບ ຂໍ້ຮຽກຮ້ອງຂອງເພິ່ນ ເພື່ອຕີຊະນະໄພອຶດຫິວ. ບໍ່ມີແຜ່ນດິນຕອນໃດທີ່ຍັງປະຮ້າງເປົ່າ. ພ້ອມດຽວກັນຍັງມີຄົນປູກຜັກ ໃນກະໂຕສະຖານທີ່ສາທາລະນະລັດ ແລະ ສວນດອກໄມ້. ແຕ່ລະຄອບຄົວໃຫ້ມີໄຫໃສ່ເຂົ້າສານປະຢັດໜຶ່ງໜ່ວຍໄວ້ ເພື່ອຊ່ວຍເຫລືອຜູ້ອຶດຫິວ. ຮອດທ້າຍປີມາ ທົ່ວປະເທດໄດ້ເກັບຜົນລະປູກທີ່ອຸດົມສົມບູນ: ມັນດ້າງ, ໝາກສາລີ, ໝາກຖົ່ວເຫລືອງ. ລະດູບານໃໝ່ ແລະ ລະດູແລ້ງປີຕໍ່ມາປະເທດພັດເກັບກ່ຽວ ເຂົ້າໄດ້ດີ ຢ່າງບໍ່ເຄີຍມີມາກ່ອນ. ຄວາມຈິງແລ້ວບັນຫາໄພອຶດຫິວ ໄດ້ຖືກລົບລ້າງໄປ.

ມາຕະການຈຳນວນໜຶ່ງ ທາງດ້ານເສດຖະກິດ–ສັງຄົມ ຊຶ່ງລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມເປັນຜູ້ດຳເນີນ ແມ່ນຊ່ວຍໃຫ້ເສດຖະກິດໄດ້ຮັບການຟື້ນຟູເທື່ອລະກ້າວ. ໂຮງຈັກ ແລະ ໂຮງງານໄດ້ນຳໃຊ້ລະບອບເຮັດວຽກ ວັນລະ ໘ ຊົ່ວໂມງ. ພວກເຂົາຮັບປະກັນສິດຜົນປະໂຫຍດຂອງກຳມະກອນ ໃນການພົວພັນ ຂອງເຂົາເຈົ້າກັບເຈົ້າຂອງໂຮງຈັກໂຮງງານ. ບັນຫາກ່ຽວກັບການປະຕິຮູບທີ່ດິນຢູ່ໃນຊົນນະບົດນັ້ນ ໄດ້ຖືກໂຈະໄວ້ເປັນເວລາຊົ່ວຄາວ, ຍ້ອນວ່າການປະຕິບັດການປະຕິຮູບດັ່ງກ່າວອາດເຮັດໃຫ້ເກີດມີຂໍ້ຂັດແຍ່ງຊຶນຊຸ້ນ ທີ່ຮ້າຍແຮງສຸດຂະໜາດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຄວາມເປັນເອກະພາບແຫ່ງຊາດ ອັນເປັນສິ່ງຈຳເປັນທີ່ສຸດສຳລັບຫວຽດນາມທີ່ຖືກປິດລ້ອມໂດຍພວກສັດຕູ. ເຖິງຢ່າງໃດກໍຕາມ ມາຕະການອັນສຳຄັນ ໄດ້ຖືກດຳເນີນໄປໃນຂົງເຂດກະສິກຳເຊັ່ນດຽວກັນ, ທີ່ດິນປູກຝັງ ທີ່ເປັນກຳມະສິດ ຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ພວກຫວຽດນາມທີ່ເປັນລູກແຫລ້ງຕີນມືຈັກກະພັດໄດ້ຖືກຍຶດ ແລະ ຖືກແບ່ງປັນເປັນເວລາຊົ່ວຄາວໃຫ້ຊາວນາທີ່ບໍ່ມີທີ່ດິນ, ໄດ້ປະກາດ ລົດຄ່າເຊົ່າດິນໃຫ້

ຊາວນາລົງ ໒໕% .

ລະບົບການເງິນ – ສິນເຊື່ອຂອງປະເທດຍັງຕົກຢູ່ໃນສະພາບສັບສົນທີ່ສຸດ. ອຳນາດປົກຄອງເກົ່າ ໄດ້ປະມໍລະດົກອັນສັງວອດໄວ້ໃຫ້ຄື ທະນະບັດເກົ່າຈີນໃຊ້ບໍ່ໄດ້ ຈຳນວນໜຶ່ງລ້ານຫລຽນ ຊຶ່ງໄພເງິນເຟີ້ເຮັດໃຫ້ມັນກາຍເປັນເສດເຈ້ຍເປັນກອງໆທີ່ບໍ່ມີຄ່າອີກແລ້ວ. ທະນາຄານອິນດູຈີນທີ່ອົ້ນກັບຝະລັ່ງ (ການປະຕິວັດຍັງ ບໍ່ສາມາດຍຶດເອົາກຳແພງເພັດດັ່ງກ່າວຂອງພວກນາຍທຶນສາກົນ) ໄດ້ຝ່າຝືນຄຳສັ່ງຂອງລັດຖະບານ ປະຕິວັດຊົ່ວຄາວ ແລະ ມີສ່ວນເຮັດໃຫ້ສະພາບຂອງປະເທດ ໃນຂົງເຂດການເງິນ ປັ່ນປ່ວນອົ້ນຈຸກໄຊ້. ພວກຈຽງໄຄເຊັກຜູ້ຍຶດຄອງກໍໄດ້ປະກອບສ່ວນເຂົ້າໃນການມ້າງເພທຳລາຍດັ່ງກ່າວເໝືອນກັນ. ໂດຍບໍ່ເອົາຫົວຊານຳການຄັດຄ້ານຂອງອຳນາດການປົກຄອງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ພວກຈຽງໄຄເຊັກ ໃຊ້ເງິນປອມ (ເງິນຂອງຈີນ) ທີ່ບໍ່ມີຄ່າ ເພື່ອຊຳລະສະສາງໃຫ້ລັດ ກໍຄືຢູ່ທ້ອງຕະຫລາດ.

ລັດຖະບານປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເລີ່ມຕົ້ນການເຄື່ອນໄຫວຂອງຕົນ ດ້ວຍການປະກາດຄຳລັດກ່ຽວກັບການສ້າງຄັງ ສະສົມເພື່ອເອກະລາດ. ໂຮ່ຈີມິນຮຽກຮ້ອງໄປຍັງປະຊາຊົນ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າ ນຳບັ້ນແຜ່ເງິນຄຳ, ເພັດພອຍຂອງມີຄ່າເຂົ້າໃນຄັງສະສົມ ເພື່ອເອກະລາດ. ບັ້ນຮົບດັ່ງກ່າວທີ່ມີຊວາສັບປະດາຄຳນັ້ນ ແມ່ນມີລະດັບທົ່ວຊາດ. ຄົນຈຳນວນຫລວງຫລາຍ ໄດ້ບໍລິຈາກເຄື່ອງເອ້ທີ່ເປັນອະນຸສອນສຳລັບພວກເຂົາເຈົ້າ, ບັນດາຄູ່ຜົວເມຍ ບໍລິຈາກແຫວນໝັ້ນ; ແມ່ຍິງບໍລິຈາກຕຸ້ມຫູຄຳ ຊຶ່ງເປັນເຄື່ອງຂອງ ທີ່ພວກແມ່ປ້ານ້າສາວເອົາໄວ້ໃຫ້ພວກລູກຫລານ, ພວກນັກບວດກໍບໍລິຈາກເຄື່ອງຂອງອັນມີຄ່າຂອງວັດວາອາຣາມ. ພຽງແຕ່ໃນໄລຍະສັ້ນໆເທົ່ານັ້ນ ປະຊາຊົນໄດ້ບໍລິຈາກເງິນເປັນຈຳນວນ ໒໐ ລ້ານຫລຽນ ແລະ ຄຳ ໓໗໐ ກິໂລ ໃຫ້ຄັງສະສົມເພື່ອເອກະລາດ. ສິ່ງດັ່ງກ່າວ ໄດ້ຊ່ວຍໃຫ້ລັດຖະບານກ້າວໄປ ບາດໜຶ່ງ ບົນເສັ້ນທາງກໍ່ສ້າງພື້ນຖານເສດຖະກິດແຫ່ງຊາດຢ່າງມີເອກະລາດ: ພິມຈຳໜ່າຍເງິນໃໝ່ອອກໃຊ້ຢູ່ທ້ອງຕະຫລາດ ຊຶ່ງແມ່ນເງິນດົງຂອງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ໃນເບື້ອງຕົ້ນເງິນໃໝ່ດັ່ງກ່າວຈຳໜ່າຍຢູ່ຈູງໂບ ຈາກນັ້ນກໍໄດ້ຈຳລະຈອນແຈກຢາຍໄປທົ່ວປະເທດ.

ພວກເຂົາໄດ້ບຸກຕີສັດຕູຕົວອັນຕະລາຍອີກໂຕໜຶ່ງ ເຊິ່ງໄດ້ແກ່ໄພກືກໜັງສືຢ່າງໜັກ. ລັດຖະບານ ໄດ້ປະກາດໃຊ້ຕົວອັກສອນ "ກວັກງື" ເປັນອັກສອນ ແຫ່ງຊາດ,

ການສຶກສາໂດຍບໍ່ຄິດຄ່າແບບບັງຄັບ.ດ້ວຍຄວາມພະຍາຍາມຂອງກົມ ສຶກສາແຫ່ງຊາດທີ່ຂຶ້ນກັບລັດຖະບານນັ້ນ, ພວກເຂົາໄດ້ເປີດຊຸດຮຽນລົບລ້າງໄພກືກໜັງສືກວ່າເຈັດສິບພັນຊຸດຂຶ້ນ ຢູ່ຕາມຕົວເມືອງ ແລະ ຊົນນະບົດ. ຜູ້ຄົນໄດ້ຮຽນຢູ່ກັບເຮືອນ, ໃນເວລາເດີນທາງ ແລະ ເວລາເຮັດວຽກ. ພໍ່ເຖົ້າໜວດຍາວ ຜົມຫງອກ ແມ່ເຖົ້າອາຍຸແກ່ ກໍນັ່ງຮຽນຮ່ວມກັບຊາວໜຸ່ມຢູ່ໂຕະຮຽນໜັງສື. ພາຍໃນໜຶ່ງປີເທົ່ານັ້ນ ມີຄົນອ່ານໄດ້ຂຽນເປັນ ເຖິງສອງລ້ານເຄິ່ງຄົນ.

ຮາກຖານຂອງອຳນາດປະຕິວັດໄດ້ຮັບການປັບປຸງເທື່ອລະກ້າວ, ໂຄງປະກອບການເມືອງໃໝ່ຂອງລັດ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນເຊັ່ນດຽວກັນ. ກົງຈັກບໍລິຫານເກົ່າຖືກຍຸບເລີກ. ພຽງແຕ່ໜຶ່ງອາທິດ ພາຍຫລັງຈາກການປະກາດສ້າງຕັ້ງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ລັດຖະບານກໍອອກດຳລັດ ວ່າດ້ວຍການດຳເນີນການເລືອກຕັ້ງທົ່ວປະເທດ ເຂົ້າໃນລັດຖະສະພາປະຊາທິປະໄຕໃໝ່ ເຊິ່ງໄດ້ແກ່ສະພາແຫ່ງຊາດ ໃນລະຫວ່າງສອງສາມເດືອນທີ່ຈະເຖິງ. ໜັງສືພິມສູນກາງ ໄດ້ລົງພິມຮ່າງ ລັດຖະທຳມະນູນຂອງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ພ້ອມໆກັບຄຳຮຽກຮ້ອງຂອງລັດຖະບານ ທີ່ສົ່ງໄປຍັງເພື່ອນຮ່ວມຊາດ ເພື່ອຂໍໃຫ້ພວກເຂົາເຈົ້າ ປະກອບຄວາມເຫັນ ກ່ຽວກັບຮ່າງລັດຖະທຳມະນູນດັ່ງກ່າວ ຢ່າງຕັ້ງໜ້າ. ບັນດາແຂວງເມືອງ ຕາແສງ ເລີ່ມສ້າງຕັ້ງຄະນະກຳມະການປະຊາຊົນ ດ້ວຍວິທີເລືອກຕັ້ງໂດຍກົງ. ຄະນະກຳມະການດັ່ງກ່າວ ປະກອບສ່ວນປັບປຸງຮາກຖານຂອງອຳນາດໃໝ່, ຂອງຄວາມເປັນເອກະພາບແຫ່ງຊາດ ແລະ ຂອງພັນທະພາບກຳມະກອນ ແລະ ຊາວນາໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ.

ປະທານໂຮ່ຈີມິນຕິດຕາມທຸກບັນຫາກ່ຽວກັບການກໍ່ຮ່າງສ້າງຕົວ ຂອງອົງການແຫ່ງອຳນາດປະຕິວັດຂອງປະຊາຊົນ ໂດຍສ່ວນຕົວ, ເພິ່ນເອົາໃຈໃສ່ບັນຫາເຮັດໃຫ້ການພົວພັນ ລະຫວ່າງຜູ້ຕາງໜ້າຂອງອຳນາດໃໝ່ກັບປະຊາຊົນເປັນການພົວພັນອັນຖືກຕ້ອງນັບຕັ້ງແຕ່ນີ້ທຳອິດມາ. ຢູ່ໃນຈົດໝາຍທີ່ສົ່ງໄປຫາຄະນະກຳມະການປະຊາຊົນແຂວງເມືອງ ແລະ ຕາແສງ ຂອງປະເທດ, ເພິ່ນບາກບັ່ນຕັກເຕືອນຜູ້ຕາງໜ້າຂອງອຳນາດໃໝ່ ບໍ່ໃຫ້ຊ້ຳຮອຍຄວາມຊິນເຄີຍອັນຊົ່ວຮ້າຍຂອງກົງຈັກບໍລິຫານເກົ່າ. ເພິ່ນຂຽນວ່າ :

"ພວກເຮົາຕ້ອງຈົດຈຳໄວ້ວ່າ ທຸກໆອົງການແຫ່ງອຳນາດຂອງພວກເຮົາ ຢູ່ໃນສູນກາງກໍດີຢູ່ໃນທ້ອງຖິ່ນ ລ້ວນແຕ່ເປັນຄົນຮັບໃຊ້ປະຊາຊົນ ໝາຍຄວາມວ່າພວກເຂົາເຈົ້າ

ແມ່ນຄົນທີ່ມີໜ້າທີ່ສູ້ຊົນອອກແຮງງານ ເພື່ອຜົນປະໂຫຍດຂອງປະຊາຊົນ... ຖ້າວ່າປະເທດຍາດເອົາເອກະລາດແຫ່ງຊາດມາໄດ້ແລ້ວ ແຕ່ປະຊາຊົນພັດບໍ່ມີອິດສະຫລະພາບ, ບໍ່ມີຄວາມຜາສຸກ ນັ້ນຍ່ອມໝາຍຄວາມວ່າ ຄວາມເປັນເອກະລາດ ເປັນພຽງແຕ່ຄຳເວົ້າທີ່ໄຮ້ຄວາມໝາຍ...ພວກເຮົາຕ້ອງມີຄວາມຮູ້ສຶກຮັກແພງປະຊາຊົນ, ມີແຕ່ເຮັດແນວນີ້ເທົ່ານັ້ນ ປະຊາຊົນຈຶ່ງຈະຮັກແພງ ແລະ ນັບຖືພວກເຮົາ ".

ໃນກອງປະຊຸມຂອງຄະນະປະຈຳສູນກາງພັກກອມມູນິດ, ໃນເວລາໂອ້ລົມກັບຫລັກແຫລ່ງພັກນັ້ນ ໂຮຈີມິນມັກທົບທວນບັນຫາດັ່ງກ່າວຢູ່ເລື້ອຍໆ. ເພິ່ນໄດ້ສັ່ງສອນໄວ້ວ່າ:

"ບໍ່ຄວນກາຍເປັນອາດຍາສິດປະຕິວັດ. ເຮັດແນວນັ້ນປະຊາຊົນຈະບໍ່ໃຫ້ ການສະໜັບສະໜູນພວກສະຫາຍ. ຄວາມເວົ້າຕ້ອງໄປຄູ່ກັບການກະທຳ, ພວກເຮົາຕ້ອງເປັນແບບຢ່າງ ຈຶ່ງຈະດຶງດູດເອົາເພື່ອນຮ່ວມຊາດໄດ້".

ແຕ່ລະວັນ ປະທານໂຮຈີມິນຕ້ອງຕ້ອນຮັບແຂກຫລາຍທີ່ສຸດ, ສ່ວນໜຶ່ງແມ່ນແຂກຕ່າງປະເທດ. ແຂກເຫລົ່ານັ້ນໄດ້ແກ່ນາຍທະຫານກອງທັບຈຽງໄຄເຊັກ ຊຶ່ງມັກຈອງຫອງມາທວງເອົາອັນໃດອັນໜຶ່ງ, ຜູ້ຕາງໜ້າຄະນະທູດຂອງປະເທດ ຜູ້ເປັນພັນທະມິດກັນ ເຊິ່ງໄດ້ແກ່ອັງກິດ-ອາເມລິກາ ແລະ ນັກໜັງສືພິມຕ່າງປະເທດ. ເຖິງຢ່າງໃດກໍຕາມ ຜູ້ແທນປະຊາຊົນ ທີ່ມາຈາກທົ່ວທຸກເຂດ ຂອງປະເທດຫວຽດນາມກໍຍັງແມ່ນແຂກທີ່ມີຈຳນວນຫລາຍກວ່າໝູ່ຢູ່. ຜູ້ຄົນທີ່ຢາກພົບປະທານມີຫລາຍທີ່ສຸດ ສະນັ້ນໃນການປະຊຸມຄະນະປະຈຳສູນກາງພັກ ຈຶ່ງມີຄົນສະເໜີໃຫ້ຈຳກັດຈຳນວນແຂກລົງຫລາຍທີ່ສຸດ ແຕ່ໂຮຈີມິນຄັດຄ້ານຢ່າງເດັດຂາດ ເພິ່ນເວົ້າວ່າ:

" ລັດຖະບານເຮົາຫາກໍຖືກສ້າງຕັ້ງຂຶ້ນມາ ສະນັ້ນຈຶ່ງເປັນສິ່ງທຳມະດາວ່າເພື່ອນຮ່ວມຊາດຢາກຖາມພວກເຮົາກ່ຽວກັບບັນຫານາໆປະການ. ອີກປະການໜຶ່ງ ການພົບພໍ້ຄັ້ງຈຸ່ງຊຸແມ່ນໂອກາດທີ່ເອື້ອອຳນວຍ ເພື່ອຈະໄດ້ອະທິບາຍໃຫ້ແຕ່ລະຄົນເຂົ້າໃຈແຈ້ງເຖິງນະໂຍບາຍຂອງລັດຖະບານອີກເທື່ອໜຶ່ງ. ພວກເຮົາບໍ່ສາມາດປ່ອຍໃຫ້ຄົນຄິດວ່າ ພົບພໍ້ກັບພວກເຮົາແມ່ນຍາກຊໍາເທົ່າກັນກັບພົບອາຍາເຈົ້ານາຍໃນເມື່ອກ່ອນ.

ໄພອັນຕະລາຍຈາກພາຍນອກ, ການນາຍຊູ່ຂອງອິດທິກຳລັງຈັກກະພັດວ່າ ຈະບີບ

ຣັດການປະຕິວັດໃຫ້ຕາຍ ກໍຍັງສືບຕໍ່ເພີ່ມຂຶ້ນອັກໄຊ. ຕົກມາຮອດກາງເດືອນກັນຍາ ຈຳນວນພົນທະຫານຈຽງໄຄເຊັກ ທີ່ຢູ່ພາກເໜືອຫວຽດນາມ ເພີ່ມຂຶ້ນຮອດສອງແສນຄົນ . ແນ່ນອນວ່າ ເປົ້າໝາຍຂອງກອງທັບໃຫຍ່ດັ່ງກ່າວ ບໍ່ພຽງແຕ່ແມ່ນການປົດອາວຸດ ກອງທັບຍີ່ປຸ່ນທີ່ຍອມຈຳນົນ ແລະ ເສຍຂວັນເທົ່ານັ້ນ. ພວກຈຽງໄຄເຊັກເຫັນວ່າໂອກາດອຳນວຍ ຊຶ່ງພວກເຂົາຄອງຄອຍມາແຕ່ດົນແລ້ວ ເພື່ອຍຶດຄອງດິນແດນຫວຽດນາມນັ້ນ ໄດ້ມາເຖິງແລ້ວ. ພວກເຂົາຄາດໝາຍວ່າ ຢ່າງນ້ອຍທີ່ສຸດ ພວກເຂົາອາດຈະສ້າງຕັ້ງລະບອບ ທີ່ຢູ່ພາຍໃຕ້ການບັນຊາຂອງພວກເຂົາຂຶ້ນ ນັບຕັ້ງແຕ່ເສັ້ນຂະໜານທີ ໑໖ ຂຶ້ນເມືອພາກເໜືອ. ນຸກຄົນທີ່ "ເໜາະສົມ " ກໍໄດ້ຖືກກະກຽມໄວ້ຄົບຖ້ວນແລ້ວ. ຢູ່ໃນກອງທັບທີ່ບຸກເຂົ້າຫວຽດນາມ ນາຍພົນທະຫານຈີນໄດ້ນຳເອົາຫົວໜ້າຜູ້ບອກໄດ້ ໃຊ້ຟັງຂອງສົມນິບາດປະຕິວັດຂອງຫວຽດນາມ ແລະ ພັກຄະນະຊາດຫວຽດນາມ ພ້ອມດ້ວຍພວກໂຈນ ທີ່ມາຈາກຄົນຫວຽດເສດສັງຄົມ ຊຶ່ງໄດ້ຮັບການລ້ຽງເກືອສິດສອນຢູ່ໃນ ກອງທັບຈຽງໄຄເຊັກ ໄປນຳກັນ.

ບົນເສັ້ນທາງໄປຮ່າໂນ້ຍ ພວກຈຽງໄຄເຊັກໄດ້ປົດອາວຸດກອງທະຫານລາດ ກອງຫລອນທ້ອງຖິ່ນ ແລະ ທັບມ້າງຄະນະກຳມະການປະຕິວັດຂອງປະຊາຊົນ, ແລ້ວເອົາພວກລູກແຫລ້ງຕົນມືຂອງພວກເຂົາເຈົ້າມາແທນທີ່.

ວັນທີ ໑໑ ເດືອນກັນຍາ ລີຫານ ຜູ້ບັນຊາການກອງທັບຈີນ ຂີ່ຍົນມາລົງທີ່ຮ່າໂນ້ຍ. ມີລູນມາ ຢູ່ຕາມຝາເຮືອນ ແລະ ຢູ່ຕາມປ້າຍໂຄສະນາ ປະກົດມີໃບແຈ້ງຂ່າວຂຽນເປັນພາສາຈີນ, ໃບແຈ້ງຂ່າວອະທິບາຍໃຫ້ພູກຄົນຮູ້ວ່າ ອັນໃດທີ່ອະນຸຍາດໃຫ້ເຮັດໄດ້ ແລະ ອັນໃດທີ່ຫ້າມບໍ່ໃຫ້ເຮັດ. ກອງທັບຈຽງໄຄເຊັກເຮັດຕົວທຳທ່າວ່າ ຢູ່ຮ່າໂນ້ຍຄືຈັ່ງວ່າບໍ່ມີອຳນາດປົກຄອງອັນໃດທັງສິ້ນ, ສະນັ້ນ ພວກເຂົາຈຶ່ງຈຳຕ້ອງແບກຫາບຄວາມຮັບຜິດຊອບຄຸ້ມຄອງນະຄອນຫລວງຮ່າໂນ້ຍ ແລະ ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ.

ຢູ່ພາກໃຕ້ຂອງປະເທດ ເຫດການໄດ້ແຜ່ລາມໄປຢ່າງໜ້າສະຫລົດໃຈບໍ່ໜ້ອຍ . ວັນທີ ໖ ເດືອນກັນຍາ ກອງທັບອັງກິດກອງທຳອິດໄດ້ມາເຖິງໄຊງ່ອນ. ຜູ້ຕາງໜ້າອັງກິດບໍ່ຮັບຮູ້ລັດຖະບານຂອງປະເທດສາທາລະນະລັດປະຊາທິປະໄຕຫວຽດນາມ ແລະທວງໃຫ້ປົດອາວຸດກອງທະຫານປົດປ່ອຍ. ຈາກນັ້ນບໍ່ດົນ ກອງທະຫານສ່ວນອກກອງທຳອິດຂອງຝະລັ່ງກໍໄດ້ມາເຖິງໄຊງ່ອນເໝືອນກັນ ດ້ວຍຍົນອົບສົ່ງ ແລະ ເຮືອຮົບອັງກິດ.

ເຈຍເຢຣີ ອັກຊັງລິເຢີ ຈອມພົນເຣືອ ຊຶ່ງເປັນຊຸນພົນໃນອະດີດ, ທັງເປັນມືຂວາຂອງເດີໂກນ ໄດ້ຖືກແຕ່ງຕັ້ງເປັນຂ້າຫລວງໃຫຍ່ຂອງຝະລັ່ງຢູ່ອິນດູຈີນ ແລະ ເປັນຜູ້ບັນຊາການສູງສຸດຂອງກຳລັງປະກອບອາວຸດຝະລັ່ງ ຢູ່ພາກຕາເວັນອອກໄກ.

ຄືນວັນທີ ໒໒ ຕໍ່ໃສ່ວັນທີ ໒໓ ເດືອນກັນຍາ ກອງທັບຝະລັ່ງ ລົງມືທຳການສູ້ຮົບຢູ່ພາກໃຕ້, ທຳອິດຢູ່ໄຊງ່ອນ ແລະ ຖັດຈາກນັ້ນ ຢູ່ຕົວເມືອງອື່ນໆ ເຂດປາກແມ່ນ້ຳຂອງ. ການສູ້ຮົບຕາມຖະໜົນຫົນທາງ ຂອງໄຊງ່ອນ ຊຸບັດຂຶ້ນ ຫລາຍວັນຕິດໆກັນ. ໃນໄລຍະດັ່ງກ່າວ ອົງຄະນະພັກກອມມູນິດອິນດູຈີນ ແລະ ອົງການຫວຽດມິນຂອງເມືອງໄຊງ່ອນ ໄດ້ຍົກຍ້າຍໄປຢູ່ເຂດຊົນນະບົດ ແລະ ກະກຽມສ້າງຖານທີ່ໝັ້ນ ຢູ່ແຫ່ງດັ່ງກ່າວ. ວັນທີ ໒໔ ເດືອນກັນຍາ ປະຊາຊົນເມືອງໄຊງ່ອນຢູ່ຕາມຈຸດ ທີ່ຕັ້ງເຄື່ອງກັ້ນຂວາງທາງ ແລະ ຈຸດສູ້ຮົບຢູ່ໃນໃຈກາງເມືອງກໍຄືຢູ່ຕາມເຂດຊານເມືອງ ລ້ວນແຕ່ໄດ້ຟັງຄຳຮຽກຮ້ອງຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມຊຶ່ງສົ່ງກະຈາຍສຽງຜ່ານສະຖານີວິທະຍຸ "ສຽງຫວຽດນາມ ຈາກຮ່າໂນ້ຍ".

"ເພື່ອນຮ່ວມຊາດນາມໂບທັງຫລາຍ ! ປະເທດເຮົາ ພໍແຕ່ຍາດເອົາສິດເອກະລາດມາໄດ້ ກໍ່ຊ້ຳພັດຕົກເປັນເປົ້າໝາຍຂອງການຮຸກຮານ ຈາກນອກປະເທດ... ຂ້າພະເຈົ້າກໍຄືເພື່ອນຮ່ວມຊາດທົ່ວປະເທດ ລ້ວນແຕ່ເຊື່ອໃນຄວາມເດັດດ່ຽວ ແລະ ນ້ຳໃຈຮັກຊາດອັນບໍ່ມີຂອບເຂດຂອງເພື່ອນຮ່ວມຊາດນາມໂບ. ພວກສະຫາຍ ຈົ່ງຈົດຈຳໄວ້ວ່າ ຍອມຕາຍເພື່ອອິດສະຫລະພາບ ຍັງດີກວ່າ ມີຊີວິດຢູ່ເປັນຂ້າທາດ. ລັດຖະບານ ກໍຄືປະເທດທັງໝົດຈະສະໜັບສະໜູນ ຢ່າງເຕັມທີ່ຕໍ່ນັກຮົບ ແລະ ປະຊາຊົນຂອງນາມໂບທີ່ກຳລັງຕໍ່ສູ້ ຢ່າງເສຍສະຫລະ ເພື່ອປົກປັກຮັກສາເອກະລາດຂອງປະເທດຊາດ. ພວກເຮົາຈະຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ ຍ້ອນວ່າຄວາມເປັນເອກະພາບ ແຫ່ງຊາດເປັນກຳລັງແຮງອັນຍິ່ງໃຫຍ່ຂອງພວກເຮົາ. ພວກເຮົາເດັດຂາດຈະຕ້ອງ ໄດ້ຮັບໄຊຊະນະ ເພາະວ່າການຕໍ່ສູ້ຂອງພວກເຮົາ ແມ່ນການຕໍ່ສູ້ເພື່ອພາລະກິດອັນຊອບທຳ..."

ຄະນະບໍລິຫານງານສູນກາງພັກຕັດສິນໃຈສົ່ງທະຫານກອງໝູນໄປຍັງ ນາມໂບຢ່າງຮີບດ່ວນ. ອີງຕາມຄວາມຮຽກຮ້ອງຂອງຄະນະກຳມະການໃຫຍ່ຂອງຫວຽດມິນ ໄດ້ມີການຈັດຕັ້ງກອງທະຫານອາສາສະໝັກ "ມຸ່ງໜ້າສູ່ພາກໃຕ້" ຂຶ້ນຢູ່ທົ່ວທຸກແຫ່ງ. ກອງ

ທະຫານປົດປ່ອຍກໍເຊັ່ນດຽວກັນກັບສະມາຊິກພັກຈຳນວນຫລວງຫລາຍ ໄດ້ຮັບຄຳສັ່ງໃຫ້ອອກເດີນທາງໄປນາມໂບຢ່າງຮີບຮ້ອນ. ແຕ່ລະວັນ ຂະບວນລົດໄຟ ທີ່ບັນທຸກຄົນເຕັມຕູ້ລົດ ຊຶ່ງເຄື່ອນອອກຈາກສະຖານີຮ່າໂນ້ຍ ແລະ ຕົວເມືອງອື່ນໆ ລ້ວນແຕ່ມຸ່ງໜ້າໄປສູ່ພາກໃຕ້.

ການປ້ອງກັນໄຊງ່ອນມີເປົ້າໝາຍໃໝ່ຢ່າງບໍ່ເຄີຍມີມາກ່ອນ. ບໍ່ມີໃຜຮູ້ວ່າແມ່ນໃຜເປັນຄົນທຳອິດທີ່ຍົກຄຳຮຽກຮ້ອງຂຶ້ນວ່າ "ພວກເຮົາຕ້ອງ ປົກປັກຮັກສານະຄອນຂອງໂຮ່ຈີມິນ!" ແຕ່ວ່າຄຳຂວັນດັ່ງກ່າວໄດ້ແຜ່ລາມໄປທົ່ວປະເທດຢ່າງວ່ອງໄວ, ດິງດູດເອົານັກລົບອາສາສະໝັກເຂົ້າໃນກອງທະຫານ"ມຸ່ງໜ້າສູ່ພາກໃຕ້" ນັບມື້ນັບເພີ່ມຂຶ້ນ. ໃນເວລານັ້ນໄຊງ່ອນໄດ້ຮັບຊື່ໃໝ່ຄື ນະຄອນໂຮ່ຈີມິນ, ໑໐ ປີຕໍ່ມາ ໄຊງ່ອນຈຶ່ງໄດ້ຕັ້ງຊື່ດັ່ງກ່າວຢ່າງເປັນທາງການ.

ຢູ່ເຂດກອງຫລອນ, ບໍ່ຫ່າງຈາກຕົວເມືອງມີຖໍຊຶ່ງຕັ້ງຢູ່ ເຂດທົ່ງພຽງແມ່ນ້ຳຂອງ ກອງປະຊຸມວິສາມັນຂອງອົງຄະນະພັກນາມໂບໄດ້ຖືກໄຂຂຶ້ນຢ່າງຮີບດ່ວນ. ສະຫາຍໂຕນດຶກຖັງ, ເລຢວນ ທີ່ຫາກໍອອກຈາກຄຸກ ແລະ ສະຫາຍຮວ່າງກວັກຫວຽດ ໄດ້ເຂົ້າຮ່ວມກອງປະຊຸມ. ກອງປະຊຸມຕົກລົງກັນວ່າ ໂດຍອີງໃສ່ອົງການແຫ່ງອຳນາດປະຊາທິປະໄຕປະຊາຊົນ ຢູ່ຕາມເຂດຊົນນະບົດນັ້ນຈະຕ້ອງສ້າງຕັ້ງກຳລັງປະກອບອາວຸດປະຊາຊົນແລະເປີດກວ້າງສົງຄາມຕໍ່ຕ້ານຂອງທົ່ວປວງຊົນ ເຊິ່ງດຳເນີນໄປຢູ່ໃຕ້ການນຳພາອັນມີປະສິດທິພາບຂອງພັກກອມມູນິດອິນດູຈີນ. ສະນັ້ນ,ຢູ່ພາກໃຕ້ຫວຽດນາມ, ພາຍຫລັງໄຊຊະນະຂອງການປະຕິວັດ ໜຶ່ງເດືອນ, ສາທາລະນະລັດຜູ້ໜຸ່ມນ້ອຍ ຈຶ່ງຈຳຕ້ອງກຳອາວຸດເພື່ອປ້ອງກັນຕົນເອງໃຫ້ພົ້ນຈາກສັດຕູພາຍນອກ.

ວັນໜຶ່ງຕົ້ນເດືອນຕຸລາ ຮ່າໂນ້ຍໄດ້ຮັບແຈ້ງການ ຢ່າງກະທັນຫັນວ່າ ອີກບໍ່ເທົ່າໃດຊົ່ວໂມງຕໍ່ໜ້ານີ້ ຈະມີເຮືອບິນຂອງກຳລັງທະຫານອາກາດອາເມລິກາລົງຈອດທີ່ເດີ່ນບິນຢາເລີມ. ຢູ່ເທິງເຮືອບິນມີ ໂຮ່ ແລັງເຕີນ ລັດຖະມົນຕີປ້ອງກັນປະເທດຂອງລັດຖະບານຈຽງແຂັງ ແລະ ນາຍພົນ ມາກລິວເຢີ ຜູ້ບັນຊາການກອງທັບ ອາເມລິກາຢູ່ຈີນ. ເປົ້າໝາຍຂອງການຢ້ຽມຢາມດັ່ງກ່າວບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ. ເຖິງແມ່ນວ່າ ມີເວລາໜ້ອຍທີ່ສຸດກໍຕາມ, ແຕ່ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມກໍໄດ້ອອກຄຳສັ່ງໃຫ້ຈັດຕັ້ງການໂຮມຊຸມນຸມມິດຕິງໄວ້ ເນື່ອງໃນໂອກາດການຢ້ຽມຢາມຂອງ "ພວກພັນທະມິດ" ເພື່ອສະແດງໃຫ້ເຂົາເຈົ້າເຫັນເຖິງຄວາມເດັດດ່ຽວ ຂອງປະ

ຊາວຊົນຫວຽດນາມ ໃນການປົກປັກຮັກສາຫມາກຜົນປະຕິວັດ. ຊາວຮ່າໂນ້ຍເກືອບ · ນີ ແສນຄົນຕອບສະຫນອງຕາມຄໍາຮຽກຮ້ອງຂອງລັດຖະບານ ແລະ ພາກັນເດີນຂະບວນ. ຂະບວນແຫ່ຜ່ານຕຶກທີ່ເຄີຍເປັນສໍານັກງານຜູ້ສໍາເລັດລາຊະການ ແລະຮ້ອງຄໍາຂວັນວ່າ: "ປະເທດຫວຽດນາມເປັນຂອງຄົນຫວຽດນາມ!", "ສະຫນັບສະຫນູນ ລັດຖະບານຊົ່ວຄາວຂອງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ !", " ສະຫນັບສະຫນູນ ແນວໂຮມຫວຽດມິນ !", "ສະຫນັບສະຫນູນປະທານໂຮ່ຈີ່ມິນ ! ".

ພາຍລູນມາຈຶ່ງຮູ້ວ່າ ກ່ອນອອກເດີນທາງໄປຮ່າໂນ້ຍ ໂຮ່ ແອັງເຕີນ ລັດຖະມູນຕີກະຊວງປ້ອງກັນປະເທດຈີນໄດ້ຮັບຄໍາສັ່ງອັນເດັດຂາດຈາກລັດຖະບານຈູງແອັງວ່າ "ໃຫ້ຍຶງນັກກອມມູນິດ, ໃຫ້ຈັບໂຮ່ຈີ່ມິນ". ແຕ່ວ່າ ເມື່ອລັດຖະມູນຕີປ້ອງກັນ ປະເທດຈີນມາຮອດປະເທດຫວຽດນາມແລ້ວ ເຂົາຈຶ່ງເຫັນວ່າ ທະຫານ ໒໐໐ ພັນຄົນທີ່ຢູ່ໃຕ້ການ ບັນຊາຂອງເຂົານັ້ນ ແນ່ນອນວ່າຍັງບໍ່ພຽງພໍ ເພື່ອປະຕິບັດເລ່ກົນຂອງຈູງແອັງ. ສະນັ້ນເຂົາຈຶ່ງສັ່ງໃຫ້ ລີ ຫານ ແລະ ບັນດາຜູ້ຮອງຂອງ ລີ ຫານ ສືບຕໍ່ແນວທາງເກົ່າ ຄືປົດເຂຍຜູ້ຕາງຫນ້າຂອງຫວຽດມິນອອກຈາກອົງການອໍານາດປະຕິວັດເທື່ອລະກ້າວ ເພື່ອທີ່ຈະປ່ຽນແທນພວກເຂົາເຈົ້າ ດ້ວຍຄົນຂອງພວກເຂົາ. ຈາກນັ້ນ ໂຮ່ ແອັງເຕີນ ກໍອອກເດີນທາງກັບຄືນປະເທດ.

ໃນຈໍານວນຄົນ "ຂອງພວກເຂົາ" ມີ ຫງວຽນຮາຍເທີນ ຫົວຫນ້າຂອງ ສັນນິບາດປະຕິວັດຂອງຫວຽດນາມທີ່ໃຜໆກໍ່ຮູ້ຈັກ, ເຂົາສະແດງອອກໃຫ້ເຫັນແນວຄິດກະຫາຍສົງຄາມເປັນພິເສດ. ເຂົາເອງ ແລະ ບັນດາຜູ້ສົມຮູ້ຮ່ວມຄິດຂອງເຂົາ ໄດ້ປະກາດຢ່າງເປີດແປນວ່າ ກອງທັບຈີນແມ່ນບ່ອນອີງຂອງພວກເຂົາ, ສະນັ້ນ ຖ້າຫວຽດມິນບໍ່ຮັບເອົາພວກເຂົາເຂົ້າຢູ່ໃນຄະນະລັດຖະບານແລ້ວ ພວກເຂົາກໍ່ຈະເຮັດລັດຖະປະຫານດ້ວຍວິທີການທະຫານ.

ການເຄື່ອນໄຫວຂອງບັນດາຫົວຫນ້າພັກຄະນະຊາດຫວຽດນາມ ເລິກແລບກວ່າ, ສະນັ້ນ ຈຶ່ງເປັນອັນຕະລາຍກວ່າ. ໃນທັນທີທີ່ປະກົດຕົວຢູ່ຮ່າໂນ້ຍ ພວກເຂົາກໍ່ຈັດຕັ້ງການພິມຫນັງສືພິມຂອງພວກເຂົາຂຶ້ນໂລດ ເພື່ອດໍາເນີນການໂຄສະນາຢ່າງປ່ວງປ້າຕ້ານຫວຽດມິນ. ຢູ່ທີ່ປະຕູໂຮງທາງເຂົ້າໄປຍັງກອງບັນນາທິການຫນັງສືພິມ ຂອງພວກເຂົາຊຶ່ງຕັ້ງຢູ່ຖະຫນົນກວານແທັງໃກ້ກັບຫນຶ່ງໃນບັນດາໂບດໃຫຍ່ຂອງຮ່າໂນ້ຍ, ໄດ້ຕິດຕັ້ງໂທລະໂຄ່ງຫນ່ວຍບັກໃຫຍ່ທີ່ສົ່ງສຽງປ້ອຍດ່າ ແລະ ໃສ່ຮ້າຍປ້າຍສີລັດຖະບານ ໂຮ່ຈີ່ມິນ .

ໂດຍບໍ່ຈຳກັດຕົນຢູ່ພຽງແຕ່ການໂຄສະນາເທົ່ານັ້ນ, ພວກລູກມືຂອງພັກຄະນະຊາດຫວຽດນາມຍັງລອບສັງຫານພະນັກງານຫລັກແຫລ່ງຂອງຫວຽດມິນ, ລັກເອົາຄົນ, ປຸ້ນທະນາຄານ.

ການເຄື່ອນໄຫວຂອງ "ແນວທີ່ຫ້າ" ຂອງຈຽງໄຄເຊັກ ເຮັດໃຫ້ບັນດາສະມາຊິກພັກກອມມູນິດອິນດູຈີນຄຽດແຄ້ນທີ່ສຸດ. ມີຫລາຍຄົນເລັ່ງທວງໃຫ້ລັດຖະບານ ຕ້ອງກະທຳການແກ້ແຄ້ນຢ່າງເດັດຂາດ. ມື້ໜຶ່ງ ຢູ່ໃນຊຸດບຳລຸງການເມືອງ ພາກຄ່ຳທີ່ ສຳນັກງານປະທານປະເທດ, ສະຫາຍປ້ອງກັນໂຮ່ຈີ່ມິນຄົນໜຶ່ງ ເຊິ່ງອົດບໍ່ລົມທົນບໍ່ໄດ້ຈຶ່ງເວົ້າກັບເພິ່ນວ່າ:

" ລູງເອີຍ ຈະທົນພວກໂຫດຫ້ຽມ, ສາມານ ແລະ ຂາດມະໂນທຳອີກດົນປານໃດ ? ຫລານເຊື່ອວ່າ ທະແນມແຕ່ລູງອອກຄຳສັ່ງ ພຽງແຕ່ຄືນດຽວເທົ່ານັ້ນ ພວກຫຼານຈະປັດກວາດ ພວກຂີ້ເຫຍື້ອເໜົ່າເໝັນເຫລົ່ານັ້ນ ລົງຄອງເໝືອງໝົດ !"

ປະທານໂຮ່ຈີ່ມິນເຜີຍຍິ້ມຕໍ່ທ່າທີໃຈຮ້ອນຂອງນັກຮົບໜຸ່ມນ້ອຍ. ເພິ່ນຊີ້ມືໄປອ້ອມຕົວແລ້ວເວົ້າຂຶ້ນວ່າ:

" ສົມມຸດວ່າ ມີໝູໂຕໜຶ່ງເຂົ້າມາຫ້ອງແລ້ວກັດແຫ້ນ ເຄື່ອງເຮືອນຊຸດໃໝ່, ພວກຫລານຈະເຮັດແນວໃດ ? ເອົາກ້ອນຫີນແກ່ວງໃສ່ ຫລື ໄລ່ຊູບມັນ ? "

" ແນ່ນອນວ່າ ຈະເອົາກ້ອນຫີນແກ່ວງໂລດເລໃສ່ມັນ ຢູ່ໃນຫ້ອງກໍເປັນໜ້າຢາກຫົວແທ້ງ ", ນັກຮົບຕອບດ້ວຍຄວາມລະອາຍ.

" ເຮັດການເມືອງກໍຄືກັນນັ້ນລະ: ຕ້ອງສະແດງຄວາມຮອບຄອບ, ລະມັດລະວັງ, ຕ້ອງຊັ່ງຊາເບິ່ງວ່າຈະມີຜົນສະທ້ອນອັນໃດເກີດຂຶ້ນຢູ່ໃນແຕ່ລະບາດກ້າວ", ໂຮ່ຈີ່ມິນ ອະທິບາຍສູ່ນັກຮົບຟັງ.

ພາຍຫລັງທີ່ການປະຕິວັດໄດ້ຮັບໄຊຊະນະແລ້ວ, ໂຮ່ຈີ່ມິນເປັນປະທານປະເທດແລະເປັນປະທານຄະນະກຳມະການໃຫຍ່ຫວຽດມິນ. ບົດບາດຊີ້ນຳຂອງພັກ ບໍ່ໄດ້ຖືກຍົກຂຶ້ນມາເວົ້າຢ່າງເປີດເຜີຍ, ຍິ່ງໄປກວ່ານັ້ນໃນວັນທີ໑໑ເດືອນພະຈິກປີ໑໙໔໕ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນປະກາດຍຸບເລີກຕົນເອງຢ່າງເປັນທາງການ. ແຕ່ໃນຕົວຈິງແລ້ວພັກຍັງສືບຕໍ່ເຄື່ອນໄຫວປິດລັບຢູ່. ສະພາບການບັງຄັບໃຫ້ດຳເນີນຍຸດໂທບາຍ ດັ່ງກ່າວເພື່ອປັບປຸງອຳນາດຂອງປະຊາຊົນບົນພື້ນຖານແຫ່ງຊາດແລະຮັກຊາດໃຫ້ ເຂັ້ມແຂງກວ່າເກົ່າ, ເພື່ອບໍ່ໃຫ້ພວກປະຕິການ, ພວກຈຽງໄຄເຊັກ, ພວກລ່າເມືອງຂຶ້ນໝູນໃຊ້ລັດທິ

ຕ້ານກອມມູນິດ ໃນການຕໍ່ສູ້ຕ້ານອຳນາດຂອງປະຊາຊົນ. ເຖິງວ່າຫລັກແຫລ່ງພັກ ມີຕຳແຫນ່ງຂັ້ນນຳພາຫລາຍບ່ອນກໍຕາມ ແຕ່ທາງຮູບນອກແລ້ວ ພວກເພິ່ນ ແມ່ນຜູ້ຕາງຫນ້າຂອງຫວຽດມິນ. ຫນ້າທີ່ແມ່ນຢູ່ໃນບ່ອນວ່າ ຕ້ອງເຮັດແນວໃດ ເພື່ອບໍ່ໃຫ້ສັດຕູຮູ້ຈັກ ພະນັກງານຂອງພັກ ໃນໄລຍະຫນຶ່ງທີ່ສັບສົນທີ່ສຸດ, ຊຶ່ງການປະຕິວັດກຳລັງຜ່ານຜ່າ, ທັງຮັບປະກັນໃຫ້ມີຄວາມອາດສາມາດເຄື່ອນໄຫວໃຕ້ດິນ ຖ້າວ່າໃນອະນາຄົດຫາກເກີດ ມີຄວາມຈຳເປັນຢ່າງກະທັນຫັນ. ນອກນັ້ນ ເນື່ອງຈາກລະດັບສະຕິຕື່ນຕົວທາງດ້ານ ການເມືອງຂອງມະຫາຊົນຍັງຕ່ຳ, ຍິ່ງໄປກວ່ານັ້ນ ປະຊາຊົນຕົກຢູ່ພາຍໃຕ້ຜົນກະທົບຂອງລະບົບໂຄສະນາຕ້ານກອມມູນິດຢ່າງປ່ອງບ້ານັບເປັນເວລາຫລາຍປີມາແລ້ວ, ສະນັ້ນການເປີດເຜີຍບົດບາດນຳພາຂອງພັກກອມມູນິດອິນດູຈີນ ຢ່າງເປັນທາງການ ອາດຈະເຮັດໃຫ້ຜູ້ທີ່ສະຫນັບສະຫນູນຫວຽດມິນ ຊຶ່ງສັງກັດຢູ່ໃນຊັ້ນຄົນນາຍທຶນ ແລະ ນາຍທຶນນ້ອຍຢູ່ໃນເມືອງ ແລະ ຢູ່ຊົນນະບົດຫ່າງເຫີນຈາກຫວຽດມິນ. ນອກຈາກນັ້ນ ຍັງຕ້ອງຄຳນຶງເຖິງສະພາບທີ່ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຖືກສັດຕູປິດລ້ອມ.

ການປະຕິວັດຫວຽດນາມ ທີ່ທ້າທາຍຢ່າງບັງອາດ ກັບອິດທິກຳລັງຮ່ວມສຳພັນຂອງພວກປະຕິການສາກົນພວມຕົກຢູ່ໃນສະພາບການສັບສົນທີ່ສຸດ. ໃນເວລານັ້ນການປະຕິວັດຫວຽດນາມຍັງບໍ່ທັນມີຄວາມສາມາດສ້າງຕັ້ງສາຍພົວພັນໂດຍກົງກັບ ສະຫະພາບໂຊວຽດ. ເພື່ອກອບກູ້ເອົາສາທາລະນະລັດຫນຸ່ມນ້ອຍ ຈຶ່ງຕ້ອງເຮັດແນວໃດ ບຸກທະລຸວົງປິດລ້ອມທາງດ້ານການເມືອງ ແລະ ການທູດ, ເຊິ່ງພວກຈັກກະພັດເປັນຜູ້ສ້າງຂຶ້ນ.ແຕ່ຈະເຮັດໄດ້ແນວໃດ, ຖ້າຫາກວ່າຢູ່ພາກເຫນືອຂອງປະເທດພັດ ແມ່ນພວກຈຽງໄຄເຊັກເປັນຜູ້ຄອບງຳ, ສ່ວນທາງພາກໃຕ້ ກອງທະຫານສົ່ງນອກຝະລັ່ງ ຊ້ຳພັດຍິ່ງເພີ່ມທະວີການເຄື່ອນໄຫວຮຸກຮານ.

ສື່ມວນຊົນຕາເວັນຕົກກໍມີສ່ວນປະກອບ ໃນສ່ວນໃດສ່ວນຫນຶ່ງ ເຂົ້າໃນການສ້າງບັນຍາກາດແບບເປັນສັດຕູຢູ່ອ້ອມຂ້າງຫວຽດນາມ ທີ່ເຮັດການປະຕິວັດ. ສື່ມວນຊົນດັ່ງກ່າວ ໄດ້ບິດເບືອນເຫດການທີ່ເກີດຂຶ້ນຢູ່ຫວຽດນາມ ຢ່າງມີເຈຕະນາ ແລະ ໄດ້ໃສ່ຮ້າຍປ້າຍສີລັດຖະບານປະຕິວັດ. ນອກນັ້ນ ຢູ່ປາຣີ, ວໍຊິງຕັນ, ລອນດອນ ກໍໄດ້ຮູ້ແຈ້ງແລ້ວວ່າ ໂຮ່ຈີມິນແມ່ນຊື່ໃຫມ່ຂອງຫງວຽນອາຍກວັກ ຜູ້ນຳພັກກອມມູນິດອິນດູຈີນ, ນັກຮົບອາວຸໂສຄົນຫນຶ່ງຂອງສາກົນກອມມູນິດ. ເປັນທຳມະດາແລ້ວວ່າ ສະພາບການດັ່ງກ່າວບໍ່ສາມາດປະກອບສ່ວນ ເຮັດໃຫ້ຫນ້າທີ່ຂອງວົງການກຳອຳນາດ ຂອງມະຫາອຳນາດ

ຈັກກະພັດ ທີ່ມີຕໍ່ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ດ້ອນກວ່າເກົ່າຈັກດີ້. ວົງການກຳອຳນາດ ຂອງບັນດາປະເທດມະຫາອຳນາດ ທຳການຂວ້ຳບາດລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມກໍ່ຄືທຸກໆມາຕະການ ຊຶ່ງລັດຖະບານຫວຽດ ນາມປະຕິບັດໃນເວລານັ້ນ ຊ.ມາກຊານ ລັດຖະມຸນຕີຕ່າງປະເທດສະຫະລັດອາເມລິກາ ໄດ້ຂຽນຈົດໝາຍເຖິງເອກອັກຄະລັດຖະທູດອາເມລິກາ ຢູ່ປາຣີດັ່ງຕໍ່ໄປນີ້: "... ໂຮ່ຈີມິນຕິດຕໍ່ໂດຍກົງກັບພວກກອມມູນິດ. ແນ່ນອນວ່າພວກເຮົາຈະບໍ່ ໄດ້ຮັບຜົນປະໂຫຍດ ຖ້າວ່າກົງຈັກປົກຄອງຂອງຈັກກະພັບເມືອງອ້ອນຫາກຖືກປ່ຽນແທນດ້ວຍປັດຊະຍາ ແລະອົງການການເມືອງ ຊຶ່ງແມ່ນມົດສະກູເປັນຜູ້ນຳພາ ແລະ ຜູ້ກວດກາ".

ໃນວັນເວລາອັນສັບສົນ ທີ່ສາທາລະນະລັດຜູ້ໜຸ່ມນ້ອຍພວມປະສົບຢູ່ ຄະນະປະຈຳສູນກາງພັກກອມມູນິດອິນດູຈີນ ພະຍາຍາມພິຈາລະນາເບິ່ງວ່າສັດຕູໂຕໃດ ໃນຈຳນວນສັດຕູຕ່າງປະເທດທີ່ມີຢູ່ຢ່າງຫລວງຫລາຍ ທີ່ເປັນອັນຕະລາຍກວ່າໝູ່ໝົດ. ຫລັງຈາກການຖົກຖຽງກັນເປັນເວລາດົນນານແລ້ວ, ຄະນະປະຈຳຍອມຮັບວ່າ ເຖິງວ່າທະຫານທີ່ມີຈຳນວນຫລວງຫລາຍຂອງຈຽງໄຄເຊັກກຳລັງປະຈຳການຢູ່ ພາກເໜືອຫວຽດນາມກໍຕາມ ແຕ່ວ່າສັດຕູອັນຕະລາຍທີ່ສຸດ ຊ້ຳພັດຍັງແມ່ນພວກລ່າເມືອງຂຶ້ນເກົ່າຢູ່. ແນ່ນອນວ່າພວກເຂົາຈະບໍ່ປະລະແນວຄິດຢາກກັບຄືນມາຄອບຄອງຫວຽດນາມ, ສະນັ້ນ ຄືດັ່ງຊີ້ແຈງຢູ່ໃນມະຕິສະບັບໜຶ່ງຂອງສູນກາງພັກກອມມູນິດອິນດູຈີນວ່າ "ບໍ່ໄວກໍ້ຊ້າພວກລ່າເມືອງຂຶ້ນຝະລັ່ງ ກໍຈະຕົກລົງກັນກັບລັດຖະບານຈຽງແຊັງ ກ່ຽວກັບການກັບມາກຳເອົາອິນດູຈີນ ຖ້າວ່າຝະລັ່ງຫາກຄ້ຳປະກັນວ່າຈະເຄົາລົບຜົນປະໂຫຍດອັນສຳຄັນຂອງຈີນ".

ບົນຈິດໃຈຄືແນວນີ້ເອງ, ຄະນະປະຈຳຈຶ່ງຕັດສິນໃຈປະຕິບັດຕາມແນວທາງດັ່ງຕໍ່ໄປນີ້: ຢູ່ພາກໃຕ້ ຕ້ອງເດັດດ່ຽວຂັບໄລ່ພວກຮຸກຮານຝະລັ່ງ, ເປີດກວ້າງສົງຄາມຕໍ່ຕ້ານຂອງທົ່ວປວງຊົນ; ຢູ່ພາກເໜືອ ຕ້ອງດຳເນີນນະໂຍບາຍ ທີ່ມີລັກສະນະຫລັກການ ແຕ່ພັດຄ່ອງແຄ້ວກ່ຽວກັບພວກຈຽງໄຄເຊັກ, ຕ້ອງຫລີກເວັ້ນການເກາະຜິດ ຢ່າງເດັດຂາດ, ບໍ່ໃຫ້ເກີດມີການປະທະກັນທາງອາວຸດ, ຊອກທຸກວິທີທາງລະງັບ ພວກຈຽງໄຄເຊັກ ແລະ ຖ້າຈຳເປັນກໍປະນີປະນອມກັນສ່ຳໃດສ່ຳໜຶ່ງ.

ມີເລືອກຕັ້ງທົ່ວປະເທດເຂົ້າໃນສະພາແຫ່ງຊາດ ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມກໍໃກ້ຈະມາຮອດແລ້ວ. ພວກຈຽງໄຄເຊັກ ແລະ ລູກມືຂອງພວກເຂົາໃນສັນນິບາດປະຕິວັດຂອງຫວຽດນາມ ແລະ ພັກຄະນະຊາດຫວຽດນາມ ລ້ວນແຕ່ເຂົ້າໃຈວ່າ ພວກເຂົາບໍ່ມີຫວັງຈະໄດ້ຮັບໄຊຊະນະ ໃນການເລືອກຕັ້ງທົ່ວປະເທດຄັ້ງນີ້, ສະນັ້ນ ພວກເຂົາຈຶ່ງດຳເນີນການເຄື່ອນໄຫວທຳລາຍມ້າງເພຢ່າງເຄັ່ງຮ້ອນ ໂດຍຊອກວິທີສະກັດກັ້ນ ການດຳເນີນການເລືອກຕັ້ງທົ່ວປະເທດ. ທ້າຍເດືອນທັນວາ ນາຍພົມຕຽວວັນ ຜູ້ຕາງໜ້າດ້ານການເມືອງຂອງຈຽງໄຄເຊັກ ຢູ່ພາກເໜືອຫວຽດນາມ ໄດ້ສົ່ງສານຫວງຊຶ່ງເປັນຄືຄຳຂາດຕໍ່ປະທານໂຮ່ຈີມິນ ໂດຍຮຽກຮ້ອງໃຫ້ປັບປຸງຄະນະລັດຖະບານຊົ່ວຄາວ ກ່ອນວັນເລືອກຕັ້ງທົ່ວປະເທດ, ດ້ວຍວິທີຖອນລັດຖະມົນຕີທີ່ເປັນນັກກອມມູນິດອອກ ແລະ ເອົາຜູ້ຕາງໜ້າຂອງສັນນິບາດປະຕິວັດຂອງຫວຽດນາມ ແລະພັກຄະນະຊາດຫວຽດນາມ ມາແທນທີ່ພວກດັ່ງກ່າວນັ້ນ; ນອກຈາກນັ້ນຕ້ອງຈຶ່ງບ່ອນໃນສະພາ ໃຫ້ແກ່ສອງພັກດັ່ງກ່າວ ໗໐ ບ່ອນ, ພ້ອມດຽວກັນຕ້ອງປ່ຽນທຸງຊາດຂອງ ສາທາລະນະລັດປະຊາທິປະໄຕ ຫວຽດນາມ, ເພາະວ່າທຸງຊາດດັ່ງກ່າວ "ຄືກັນກັບທຸງຂອງສາກົນກອມມູນິດທີ່ສຸດ". ສ່ວນຫົວໜ້າທັງສອງພັກ ທີ່ນິຍົມຈີນພັດກ້າວໄປໄກກວ່ານັ້ນອີກ ເຊັ່ນພວກເຂົາຫວງເອົາຕຳແໜ່ງປະທານປະເທດ, ນາຍົກລັດຖະມົນຕີກໍຄືລັດຖະມົນຕີວ່າການກະຊວງອັນສຳຄັນຂອງ ໓ ກະຊວງ, ຊຶ່ງໃນນັ້ນມີກະຊວງພາຍໃນ, ກະຊວງປ້ອງກັນປະເທດແລະກະຊວງເສດຖະກິດ. ໃນເວລາດຳເນີນການເຈລະຈາ ໂດຍມີບັນດາ ຜູ້ຕາງໜ້າຂອງພວກຈຽງໄຄເຊັກເຂົ້າຮ່ວມນັ້ນ, ພວກເຂົາສາມາດຕົກລົງກັນແບບປະນີປະນອມໄດ້ດັ່ງຕໍ່ໄປນີ້: ຈະປະກອບລັດຖະບານຊົ່ວຄາວຄືນໃໝ່ໂດຍໃຫ້ເປັນລັດຖະບານປະສົມທີ່ມີບັນດາຜູ້ຕາງໜ້າສາມກຳລັງການເມືອງຄື ຫວຽດມິນ, ສັນນິບາດປະຕິວັດ ຂອງຫວຽດນາມ ແລະພັກຄະນະຊາດຫວຽດນາມເຂົ້າຮ່ວມນຳ. ຫງວຽນຮາຍເທິນຫົວໜ້າສັນນິບາດປະຕິວັດຂອງຫວຽດນາມຈະກຳຕຳແໜ່ງເປັນຮອງປະທານຂອງສາທາລະນະລັດປະຊາທິປະໄຕຫວຽດນາມ; ຫງວຽນເຕືອງຕາມ ຫົວໜ້າພັກຄະນະຊາດຫວຽດນາມ ຈະກຳຕຳແໜ່ງເປັນລັດຖະມົນຕີຕ່າງປະເທດ; ທັງສອງພັກດັ່ງກ່າວໄດ້ຮັບການຮັບປະກັນວ່າຈະໄດ້ທີ່ນັ່ງຈຳນວນຫລາຍພໍສົມຄວນໃນສະພາແຫ່ງຊາດໃນອະນາຄົດ. ສ່ວນທັງສອງພັກດັ່ງກ່າວເຫັນດີເຫັນພ້ອມໃຫ້ດຳເນີນການເລືອກຕັ້ງທົ່ວປະເທດໃນເວລາມໍ່ງນີ້, ໃຫ້ມີການເຕົ້າ

ໂຮມກຳລັງປະກອບອາວຸດເຂົ້າກັນແລະໃຫ້ມີການຢຸດເຊົາການຜິດຖຽງກັນຢ່າງເປີດເຜີຍ.

ຢູ່ໃນຄະນະນຳຂອງພັກກອມມູນິດອິນດູຈີນ ແລະ ຂອງຫວຽດນາມ ບໍ່ແມ່ນວ່າຈະເຂົ້າໃຈການປະນີປະນອມດັ່ງກ່າວໄດ້ຢ່າງຖືກຕ້ອງໝົດທຸກຄົນ. ມີຫລາຍຄົນທີ່ຂຸ່ນເຄືອງໃຈ ຍ້ອນວ່າຮອງປະທານຂອງ ສາທາລະນະລັດ ປະຕິວັດ ພັດຈະແມ່ນຄົນ ທີ່ລືມກະທັ້ງພາສາແມ່ຂອງຕົນ ແລະ ຍາມໃດກໍ່ສ້າງຄວາມເສຍຫາຍໃຫ້ແກ່ການປະຕິວັດ. ໃນມື້ດຽວກັນ, ມີສະຫາຍຈຳນວນໜຶ່ງມາພົບປະທານໂຮ່ຈີມິນ ແລະ ສະແດງຄວາມອັດຂ້ອງວ່າ ຍ້ອນຫຍັງເພິ່ນຈຶ່ງເຫັນດີນຳເລື່ອງຄືຈັ່ງຊີ້. ດ້ວຍອາການອິດເມື່ອຍ ຕາແດງຍ້ອນວ່ານອນບໍ່ເຕັມອີ່ມຢູ່ເປັນປະຈຳ, ປະທານໂຮ່ຈີມິນຟັງພວກເຂົາເຈົ້າເວົ້າຈົນໝົດສຽງ ຢ່າງຫຸ່ນທ່ຽງເພິ່ນບໍ່ອະທິບາຍແຕ່ຊ້ຳພັດຖາມວ່າ:

" ແມ່ນອນວ່າຝຸ່ນຄອກກໍ່ຕ້ອງເປື້ອນແມ່ນບໍ່ ? ຖ້າເອົາມັນໃສ່ທົ່ງນາໄດ້ພົນເກັບກ່ຽວທີ່ອຸດົມສົມບູນ ພວກສະຫາຍຄິດວ່າຄວນໃຊ້ມັນຫລືບໍ່ ?"

ເວົ້າລວມ ໃນເວລານັ້ນ ໂຮ່ຈີມິນເສຍເວລາ ແລະ ກຳລັງຫລາຍທີ່ສຸດ ເພື່ອເຮັດໃຫ້ຫລາຍສະຫາຍໃນພັກທີ່ຕິດພະຍາດໄຂ້ດຽງສາ "ອຽງຊ້າຍ" ມີຈິດໃຈຫຸ່ນທ່ຽງ, ໂດຍຕີລາຄາກຳລັງປະຕິວັດສູງເກີນຂອບເຂດ, ຍ້ອນຄວາມຕັ້ງໃຈ ຫລືຍ້ອນຂາດຄວາມຫຸ່ນທ່ຽງ ຫລັກແຫລ່ງພັກບາງຄົນຝ່າຝືນແນວທາງຂອງພັກທີ່ແນໃສ່ ຫລີກເວັ້ນການປະທະກັນກັບພວກຈຽງໄຄເຊັກ ມີຫລາຍເທື່ອທີ່ພວກເຂົາເຈົ້າໃຊ້ກຳລັງຮຸນແຮງ ເພື່ອຕອບໂຕ້ການທ້າທາຍຂອງພວກຈຽງໄຄເຊັກ. ຜົນທີ່ໄດ້ຮັບແມ່ນການປະທະກັນ ຢ່າງຮ້າຍແຮງເຊິ່ງໃນຕົວຈິງກໍ່ເປັນສິ່ງທີ່ຫລີກລ່ຽງໄດ້. ການປະທະກັນເຮັດໃຫ້ ສະພາບການເຄັ່ງຕຶງໂດຍບໍ່ຈຳເປັນ ແລະ ແກ້ໄຂຍາກ. ປະທານໂຮ່ຈີມິນຕ້ອງໄດ້ໃຊ້ບົດຮຽນ, ອິດທິພົນ ແລະ ຍຸດໂທບາຍອັນຄ່ອງແຄ້ວຂອງຕົນ ເພື່ອແກ້ໄຂການປະທະກັນທີ່ເກີດຂຶ້ນຢູ່ເລື້ອຍໆ.

ເຫດຜົນສຳຄັນອັນໜຶ່ງ ທີ່ຊ່ວຍໃຫ້ປະທານໂຮ່ຈີມິນໄດ້ເລືອກເອົາ ແນວທາງອັນຖືກຕ້ອງ ໃນການຕິດຕໍ່ພົວພັນກັບບັນດານາຍພົນຂອງທະຫານຈຽງໄຄເຊັກ ແມ່ນຢູ່ບ່ອນວ່າ ເພິ່ນເຄີຍດຳລົງຊີວິດເປັນເວລາດົນນານຢູ່ຈີນ ສະນັ້ນເພິ່ນຈຶ່ງຮູ້ຈັກດີ ກ່ຽວກັບທາດແທ້ກໍ່ຄືຈຸດພິເສດຂອງຄົນທີ່ສັງກັດພັກກົກມິນຕັງ ໃນສະໄໝຫລັງ ຊຸນ ຍັດເຊັນ. ບັນດານາຍພົນຂອງຈຽງໄຄເຊັກທີ່ບັນຊາກອງພົນທີ່ມາຮຸກຮານຫວຽດນາມ ສັງກັດພັກຝ່າຍກົກມິນຕັງຕ່າງໆ ເຊັ່ນ ຈູງແອ້ງ, ຢຸນນານ, ກວາງຕຸ້ງ, ກວາງໄຕ. ພວກເຂົາຜິດຖຽງກັນຢູ່ເລື້ອຍໆ. ດັ່ງນັ້ນ ເຖິງວ່າພວກເຂົາທັງໝົດ ລ້ວນແຕ່ເປັນພວກທີ່ຕ້ານກອມມູນິດກໍ່

ຕາມ ແຕ່ທ່າທີຂອງພວກເຂົາຕໍ່ລັດຖະບານໂຣ່ຈີ້ມກໍບໍ່ຄືກັນ. ມີຫລາຍຄັ້ງຫລາຍເທື່ອ ທີ່ນາຍພົນຜູ້ໜຶ່ງຢາກຈະກວນໂມໂຫໃຫ້ນາຍພົນອີກຄົນໜຶ່ງ ສະນັ້ນ ຈຶ່ງຕອບສະໜອງຕໍ່ຄວາມຮຽກຮ້ອງອັນໃດອັນໜຶ່ງຂອງອຳນາດປົກຄອງຫວຽດນາມ. ໃນຈຳນວນນາຍພົນຂອງຈຽງໄຄເຊັກ ມີບາງຄົນທີ່ເປັນຕົວອັນຕະລາຍສຳລັບຈຽງໄຄເຊັກຢູ່ດ້ວຍ. ສະນັ້ນຈຽງໄຄເຊັກ ຈຶ່ງໝູນໃຊ້ບັ້ນຮົບ "ກອງທັບຈີນບຸກເຂົ້າຫວຽດນາມ" ເພື່ອສົ່ງນາຍພົນດັ່ງກ່າວອອກຈາກເຂດທີ່ພວກເຂົາມີອຳນາດ.

ເມື່ອອະທິບາຍໃຫ້ບັນດາສະຫາຍເຂົ້າໃຈສະພາບການລະອຽດທັງໝົດ ດັ່ງກ່າວປະທານໂຮ່ຈີ້ມິນ ໄດ້ເວົ້າຂຶ້ນວ່າ:

" ອັນນີ້ແມ່ນຍຸດໂທບາຍອັນເກົ່າແກ່ຂອງຈຽງໄຄເຊັກ ເຊິ່ງໄດ້ແກ່"ຍົວະເສືອອອກຈາກຖ້ຳ". ຢູ່ໃນຄ້າຍສັດຕູຂອງພວກເຮົາ ເບິ່ງຄືວ່າສະພາບການບໍ່ຮຽບຮ້ອຍ,ພວກເຮົາຄວນໝູນໃຊ້ປັດໄຈດັ່ງກ່າວ ".

ໂຮ່ຈີ້ມິນໄດ້ສ້າງສາຍພົວພັນອັນດີທີ່ສຸດກັບ ລີ ຫານ. ສ່ວນ ລີ ຫານເອງ ກໍຕີລາຄາສູງຕໍ່ປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ. ເຂົາເປັນນາຍພົນຄົນດຽວໃນກຸ່ມນາຍພົນຂອງຈຽງໄຄເຊັກ ທີ່ເອີ້ນປະທານໂຮ່ຈີ້ມິນ ດ້ວຍຄວາມເຄົາລົບນັບຖືວ່າ "ປະທານໂຮ່". ພວກເພິ່ນທັງສອງຄົນ ມັກຈະສົນທະນາກັນ ກ່ຽວກັບບັນຫາການເມືອງຢູ່ເລື້ອຍໆ. ໂຮ່ຈີ້ມິນ ອະທິບາຍໃຫ້ນາຍພົນຜູ້ນີ້ຮູ້ ກ່ຽວກັບເປົ້າໝາຍຕໍ່ສູ້ຂອງປະຊາຊົນຫວຽດນາມ. ເມື່ອມີໂອກາດທີ່ເໝາະສົມ ໂຮ່ຈີ້ມິນມັກຈະຕຳໜິການກະທຳຕ້ານຫວຽດນາມຂອງພູ່ຕາງໜ້າຈີນ ແລະ ພວກລູກມືຂອງພວກເຂົາ.

ສະຫາຍຫວໍຫວາງວຽນຢາບ ລັດຖະມົນຕີປ້ອງກັນປະເທດໃນລັດຖະບານຊົ່ວຄາວ ທີ່ມີໂອກາດພົບປະທານໂຮ່ຈີ້ມິນທຸກວັນ ເລົ່າຄືນວ່າ:

" ສຳລັບລຸງໂຮ່ ສັດຈະທຳປະຕິວັດ ຍາມໃດກໍມີລັກສະນະຮູບປະທຳ... ດ້ວຍຄວາມສາມາດຄຳນວນສະພາບການໄດ້ໄວເປັນພິເສດ ລຸງຄືຈິ່ງວ່າຢັ່ງຮູ້ທຸກງແນວຄິດອັນເລິກລັບທີ່ສຸດຂອງສັດຕູ.

ລຸງໂຮ່ແມ່ນສັນຍາລັກແຫ່ງພະລັງຂອງຄວາມເປັນທຳ... ກະທັ້ງພວກ ທີ່ຕ້ານກອມມູນິດຢ່າງຮຸນແຮງ ເມື່ອໄດ້ໂອ້ລົມກັບລຸງໂຮ່ແລ້ວ, ກໍຍັງເກີດຄວາມເຄົາລົບນັບຖືເພິ່ນ. ປະກົດວ່າຫລັງຈາກທີ່ໄດ້ໂອລົມກັບເພິ່ນແລ້ວ ພວກເຂົາໄດ້ຫລຸດຄວາມໂຫດຮ້າຍແລະ ຄວາມກະຫາຍສົງຄາມລົງກວ່າເກົ່າ.

ນັບຕັ້ງແຕ່ເວລານັ້ນມາ ນັກການເມືອງຕ່າງປະເທດຈຳນວນຫລາຍໄດ້ເວົ້າກ່ຽວກັບພະລັງແຫ່ງຄວາມຈູງໃຈອັນຫນ້າປະຫລາດຂອງປະທານໂຮ່ຈີມິນ. ບາງຄົນຖືວ່າ ສິ່ງດັ່ງກ່າວແມ່ນເກີດມາຈາກລະດັບຄວາມຮູ້ຮອບດ້ານ, ສະຕິປັນຍາອັນສະຫລາດຫລັກແຫລມ, ມານະຈິດ ແລະ ພະລັງພິເສດຂອງເພິ່ນ. ອີກພວກຫນຶ່ງເວົ້າວ່າ ຍ້ອນຄວາມຖະຫນອມຖ່ອມຕົວ, ຄວາມງ່າຍດາຍ, ສຸຂະທັດນິຍົມ, ຄວາມເຊື່ອຫມັ້ນ, ນິໄສໃຈຄໍກົງໄປກົງມາ ແລະ ເປີດເຜີຍ, ປະສົບການຂອງຊີວິດ, ສິນທຳ...

ທຸກສິ່ງທຸກຢ່າງທີ່ເວົ້າຢູ່ເທິງນີ້ ລ້ວນແຕ່ຖືກຕ້ອງໃນສ່ວນໃດສ່ວນຫນຶ່ງ, ແຕ່ວ່າຈຸດລັກສະນະອັນຕົ້ນຕໍ ທີ່ມີລັກສະນະຄອບງຳ ໃນນິໄສໃຈຄໍຂອງປະທານໂຮ່ຈີມິນ ກໍແມ່ນນ້ຳໃຈກຽມພ້ອມເສຍສະຫລະເປັນປະຈຳເພື່ອປະຊາຊົນ, ເຮັດທຸກສິ່ງທຸກຢ່າງ ເພື່ອຄວາມສຸກຂອງປະຊາຊົນ ແລະ ປິຕຸພູມ".

໔

ຢູ່ໃນການຕໍ່ສູ້ຢ່າງເອົາເປັນເອົາຕາຍ ເພື່ອປົກປັກຮັກສາຫມາກຜົນຂອງການປະຕິວັດນັ້ນ ກ່ອນອື່ນຫມົດ ລັດຖະບານປະຕິວັດຕ້ອງໄດ້ຮັບຄວາມໄວ້ວາງໃຈ ຈາກປະຊາຊົນ, ຫມາຍຄວາມວ່າເປັນລັດຖະບານຊຶ່ງປະຊາຊົນເປັນຜູ້ເລືອກເອົາ, ໃຫ້ການສະຫນັບສະຫນູນ, ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ .ການຕົກລົງກັນກັບຫົວຫນ້າສອງພັກ ທີ່ນິຍົມຈີນ ໄດ້ເປີດທາງໄປສູ່ການດຳເນີນການເລືອກຕັ້ງທົ່ວປະເທດ ທີ່ຖືກເລື່ອນແລ້ວເລື່ອນອີກ. ໃນມື້ທຳອິດຂອງປີ ໑໙໔໖ ນັ້ນ ຫນັງສືພິມລົງພິມຄຳສັ່ງ ໃຫ້ດຳເນີນການເລືອກຕັ້ງທົ່ວປະເທດເຂົ້າໃນສະພາແຫ່ງຊາດ ໃນວັນທີ ໖ ເດືອນມັງກອນ.

ຫລາຍມື້ກ່ອນຈະມີການເລືອກຕັ້ງນັ້ນ, ຫນ່ວຍງານຂອງກຳມະກອນ, ຫມູ່ບ້ານ, ຄະນະກຳມະການປົກຄອງຈາກທົ່ວທຸກແຫ່ງຂອງປະເທດ ໄດ້ສົ່ງຈົດຫມາຍ ເຖິງລັດຖະບານ ເຊິ່ງໃນນັ້ນຂໍໃຫ້ປະທານໂຮ່ຈີມິນບໍ່ລົງສະຫມັກເລືອກຕັ້ງຢູ່ໃນເມືອງ ຫລືແຂວງໃດຫນຶ່ງ ເພາະວ່າປະຊາຊົນໃນທົ່ວປະເທດຢາກປ່ອນບັດເອົາເພິ່ນ. ຜູ້ໃດກໍລ້ວນແຕ່ ຢາກຈົດຊື່ໂຮ່ຈີມິນເປັນຄົນທຳອິດ ລົງໃນບັດເລືອກຕັ້ງຂອງຕົນ. ປະທານໂຮ່ຈີມິນ ຕ້ອງໄດ້ຕອບຈົດຫມາຍເພື່ອນຮ່ວມຊາດດັ່ງນີ້ :

"ຂ້າພະເຈົ້າເປັນພົນລະເມືອງຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເຊັ່ນດຽວກັນກັບຄົນອື່ນໆ ສະນັ້ນຂ້າພະເຈົ້າຈຶ່ງບໍ່ມີສິດ ຈະລ່ວງລະເມີດລະບຽບການ ທີ່ກຳນົດໄວ້ ໃນການດຳເນີນການເລືອກຕັ້ງ. ຂ້າພະເຈົ້າສະຫມັກເລືອກຕັ້ງ ຢູ່ຮ່າໂນ້ຍ ສະນັ້ນຈຶ່ງບໍ່ສາມາດຈະໄປສະຫມັກຢູ່ແຫ່ງອື່ນໄດ້. ຂໍຂອບໃຈເພື່ອນຮ່ວມຊາດທີ່ມີນ້ຳໃຈຮັກແພງຂ້າພະເຈົ້າ ແລະ ຂໍໃຫ້ເພື່ອນຮ່ວມຊາດຫມົດທຸກຄົນ ຈົ່ງປະຕິບັດຫນ້າທີ່ພົນລະເມືອງໃຫ້ສົມບູນ ໃນການເລືອກຕັ້ງທົ່ວປະເທດ ທີ່ຈະມາເຖິງນີ້ ".

ຢູ່ນາມໂບ ແລະ ຢູ່ພາກໃຕ້ຂອງ ຈູງໂບ ການປ່ອນບັດເລືອກຕັ້ງໄດ້ດຳເນີນໄປທ່າມກາງສຽງປືນໃຫຍ່ ແລະ ສຽງປືນນ້ອຍຈົນແສບເຂົ້າຈ້ອຍຫູ. ຢູ່ໄຊງ່ອນ,ມີທໍ ແລະ ຕົວເມືອງອື່ນໆ ຊຶ່ງທະຫານຝະລັ່ງຍຶດຄອງແລ້ວ, ຫີບບັດເລືອກຕັ້ງຖືກຍົກຍ້າຍຢ່າງລັບໆ ຈາກເຮືອນຫລັງນີ້ ໄປສູ່ເຮືອນຫລັງນັ້ນ, ຈາກຖະຫນົນເສັ້ນນີ້ ໄປສູ່ຖະຫນົນເສັ້ນນັ້ນ.ຢູ່ເຕີນອານ ແຂ້ງຮວາ ເຮືອບິນຝະລັ່ງໄດ້ຖິ້ມລະເບີດລົງບໍລິເວນເລືອກຕັ້ງ, ອັນໄດ້ເຮັດໃຫ້ມີຫລາຍຄົນຕາຍ ແລະ ບາດເຈັບ.

ເຖິງແມ່ນວ່າ ສະຖານະການການເມືອງສັບສົນທີ່ສຸດກໍຕາມ ແຕ່ປະຊາຊົນຫລາຍກວ່າ ໙໐%ໄດ້ເຂົ້າຮ່ວມໃນການປ່ອນບັດເລືອກຕັ້ງ.ປະທານໂຮ່ຈີມິນໄດ້ຮັບຄະແນນສຽງ ໙໗,໔%.ຖ້າຄຳນຶງເຖິງຄວາມຈິງທີ່ວ່າ ໃນເວລານັ້ນກຳລັງຊົນຊັ້ນ-ສັງຄົມ ບໍ່ເປັນເນື້ອດຽວຈົນເຖິງຂັ້ນໃດ, ຝ່າຍທີ່ນິຍົມຈຽງໄຄເຊັກ, ນິຍົມຍີ່ປຸ່ນ, ນິຍົມຝະລັ່ງ ແລະ ພວກປະຕິການອື່ນໆເຄື່ອນໄຫວຢ່າງຕັ້ງຫນ້າຈົນເຖິງຂັ້ນໃດກໍຕ້ອງຮັບຮູ້ວ່າຕົວເລກຂ້າງເທິງນີ້ແນ່ນອນແລ້ວວ່າແມ່ນຜົນສຳເລັດອັນຍິ່ງໃຫຍ່ແທ້ໆອັນຫນຶ່ງ,ເປັນຫລັກຖານອັນຫນຶ່ງ ທີ່ສະແດງໃຫ້ເຫັນອິດທິພົນອັນສູງສົ່ງຂອງປະທານໂຮ່ຈີມິນ ໃນປະຊາຊົນຊັ້ນຄົນຕ່າງໆ.

ແນວໂຮມຫວຽດມິນ ຍາດເອົາໄຊຊະນະມາໄດ້ຢ່າງສົມເຊີງ ໃນການເລືອກຕັ້ງຜູ້ສະຫມັກເລືອກຕັ້ງຂອງແນວໂຮມ ໄດ້ຮັບຄະແນນສຽງເລືອກຕັ້ງ ຢ່າງຖ້ວມລົ້ນ. ໃນຈຳນວນຜູ້ທີ່ຖືກເລືອກເຂົ້າໃນສະພາແຫ່ງຊາດ ມີສະມາຊິກພັກກອມມູນິດ ໑໐໔ ຄົນ ເຊິງນອນຢູ່ໃນລາຍຊື່ຜູ້ສະຫມັກເລືອກຕັ້ງ ໃນຖານະເປັນຝ່າຍ"ອິດສະຫລະ". ອີງຕາມການຕົກລົງກັນ ຜູ້ຕາງຫນ້າຂອງພັກຝ່າຍທີ່ນິຍົມຈີນ ແລະ ກຸ່ມນາຍທຶນຊາດນິຍົມມີ ໗໐ ບ່ອນນັ່ງ. ດ້ວຍການເຫັນດີຂອງຫວຽດມິນ ອະດີດເຈົ້າຊີວິດບາວດາຍ ກໍໄດ້ຖືກເລືອກເຂົ້າຢູ່ໃນສະພາແຫ່ງຊາດເຫມືອນກັນ ໂດຍໃຊ້ຊື່ເກົ່າ ວິງທຸຍ. ກ່ອນຫນ້ານັ້ນເພິ່ນ ກໍດຳລົງຕຳແຫນ່ງອັນມີກຽດ ຄືເປັນທີ່ປຶກສາຂອງລັດຖະບານຊົ່ວຄາວ.

ໃນວົງປິດລ້ອມຂອງສັດຕູ

໑

ໃນວັນທີ ໔ ເດືອນມີນາ ປີ ໑໙໔໖ ສະໄໝປະຊຸມຄັ້ງທຳອິດ ຂອງສະພາແຫ່ງຊາດໄດ້ເປີດຂຶ້ນ ຢູ່ໂຮງລະຄອນແຫ່ງຊາດຮ່າໂນ້ຍ. ວັນກ່ອນໜ້ານັ້ນ ປະທານໂຮ່ເຮັດວຽກຈົນຮອດທ່ຽງຄືນຕາມເຄີຍ, ເພິ່ນສູບຢາໝົດກອກນັ້ຕໍ່ໃສ່ກອກໃໝ່. ນັບຕັ້ງແຕ່ມື້ທີ່ໂຮ່ຈີມິນແບກຫາບໜ້າທີ່ອັນໜັກໜ່ວງຂອງຜູ້ນຳລັດນັ້ນ ເພິ່ນສູບຢາວັນໜຶ່ງໆ ແຕ່ ໔ ຫາ ໖ ຊອງ. ເຖິງແມ່ນວ່າໃບໜ້າຂອງເພິ່ນຈ່ອຍຜອມ ແລະ ຊົງອິດເມື່ອຍ ແຕ່ເພິ່ນກໍຍັງຮັກສາທ່າທີສະຫງົບ, ມີແຕ່ດວງຕາໃສໆ ເທົ່ານັ້ນ ທີ່ບົ່ງບອກວ່າມັນສະໝອງຂອງເພິ່ນກຳລັງເຮັດວຽກຢ່າງໜັກ. ນັບຕັ້ງແຕ່ເວລາທີ່ເພິ່ນເປັນປະທານ ປະຊາຊົນຫວຽດນາມ ມັກເວົ້າເຖິງແວວຕາທີ່ດຶງດູດຄວາມສົນໃຈຂອງເພິ່ນ. ຢູ່ໃນຮູບແຕ້ມທຳມະດາ, ຄູ່ຕາຂອງເພິ່ນກໍຍັງສົ່ງແສງແວວວາວ.

ສະພາແຫ່ງຊາດໄດ້ມອບໝາຍໃຫ້ຜູ້ແທນສອງຄົນ, ຜູ້ໜຶ່ງມີອາຍຸສູງທີ່ສຸດ ໄດ້ແກ່ພໍ່ເຖົ້າໂງຕືຮາ ແລະ ຜູ້ໜຶ່ງມີອາຍຸນ້ອຍທີ່ສຸດໄດ້ແກ່ ຫງວຽນດິງທີ (ປະຈຸບັນເປັນ

ນັກປະພັນທີ່ມີຊື່ສຽງ) ເປັນຜູ້ຕ້ອນຮັບປະທານຢູ່ປະຕູໂຮງລະຄອນ. ເພິ່ນຍິ້ມແຍ້ມແຈ່ມໃສ່, ກົ້ມຫົວສະແດງຄວາມນັບຖືຜູ້ແທນຢ່າງສຸພາບ, ຈາກນັ້ນກໍ່ກ້າວຂຶ້ນເວທີ ຄະນະປະທານຮ່ວມກັບສະມາຊິກລັດຖະບານ.

ບ່ອນນັ່ງຂອງຮອງປະທານຫວ່າງເປົ່າ ຫງວຽນຮາຍເທິນຄອບວ່າເຈັບປ່ວຍ ບໍ່ສາມາດເຂົ້າຮ່ວມວຽກງານຂອງສະໄໝປະຊຸມ. ອັນນີ້ເຮັດໃຫ້ຫລາຍຄົນຫົວຂວັນ ແລະ ຢັ້ງຢືນວ່າເຂົາບໍ່ກ້າເຂົ້າຮ່ວມສະໄໝປະຊຸມ, ເພາະວ່າເຂົາເວົ້າພາສາຫວຽດນາມ ບໍ່ຂອດ.

ຢູ່ສະໄໝປະຊຸມຄົບຄະນະຂອງສະພາແຫ່ງຊາດຄັ້ງທຳອິດ, ຜູ້ແທນນາມໂບຫຼາຍຄົນບໍ່ມີໜ້າເຂົ້າຮ່ວມ ຍ້ອນວ່າບໍ່ສາມາດເລັດລອດສະໜາມຮົບ ຂຶ້ນມາພາກເໜືອໄດ້.

ປະທານໂຮ່ຍ່າງອອກມາຫາ ມິໂກຣຟົນ , ສຽງຂອງເພິ່ນບົ່ງບອກເຖິງ ຄວາມຕື້ນຕັນໃຈ:

" ກອງປະຊຸມໃຫຍ່ຜູ້ແທນປະຊາຊົນຄັ້ງນີ້ ແມ່ນເທື່ອທຳອິດໃນປະຫວັດສາດຂອງປະເທດ ຫວຽດນາມເຮົາ, ມັນແມ່ນໝາກຜົນຂອງການຕໍ່ສູ້ອັນຍືດເຍື້ອຍາວນານ ແລະ ອົງອາດກ້າຫານ ເຕັມໄປດ້ວຍຄວາມເສຍສະຫລະ ແລະ ລຳບາກກາກກຳ ຂອງຄົນຫວຽດນາມຫລາຍຮຸ່ນຄົນ, ມັນແມ່ນໝາກຜົນຂອງຄວາມເປັນປຶກແຜ່ນ ຂອງເພື່ອນຮ່ວມຊາດທັງໝົດ ຊຶ່ງມີທັງຜູ້ເຖົ້າ ຄົນໜຸ່ມ, ໃຫຍ່, ນ້ອຍ, ຜູ້ທີ່ນັບຖື ສາດສະໜາຕ່າງໆ ແລະ ຜູ້ທີ່ເປັນຕົວແທນໃຫ້ແກ່ຊົນເຜົ່າຕ່າງໆ ຢູ່ບົນດິນແດນຫວຽດນາມ. ຫລັງຈາກທີ່ເພື່ອນຮ່ວມຊາດໄດ້ສາມັກຄີກັນເຂົ້າເປັນກຸ່ມກ້ອນອັນດຽວຢ່າງໝັ້ນໜຽວແລ້ວ, ພວກເຂົາເຈົ້າໄດ້ສ້າງຄວາມເປັນປຶກແຜ່ນແໜ້ນໜາ ໂດຍບໍ່ຢ້ານກົວຕໍ່ຄວາມຕາຍ ແລະ ໄພອັນຕະລາຍໃດໆ".

ໂຮ່ຈີມິນປະກາດວ່າ ລັດຖະບານສະເໜີໃຫ້ຂະຫຍາຍຈຳນວນສະມາຊິກຂອງສະພາແຫ່ງຊາດຕື່ມ ໗໐ ຄົນ ທີ່ເປັນຕົວແທນໃຫ້ແກ່ພັກຄະນະຊາດຫວຽດນາມ ແລະ ສັນນິບາດປະຕິວັດຂອງຫວຽດນາມ. ຜູ້ແທນສະພາແຫ່ງຊາດຮັບຮອງເອົາຂໍ້ສະເໜີດັ່ງກ່າວ. ຜູ້ຕາງໜ້າຂອງສອງພັກ ທີ່ມີຍິ້ມຈົນທະຍອຍກັນເຂົ້າມາແລ້ວ ເຂົາເຈົ້ານັ່ງຢູ່ບ່ອນ ທີ່ຍັງວ່າງ. ໃນເວລາທີ່ກະກຽມກອງປະຊຸມຄົບຄະນະສະພາແຫ່ງຊາດ, ມີສະຫາຍ ບາງຄົນຕັ້ງໃຈຢາກຈະແບ່ງບ່ອນນັ່ງຢູ່ໂຮງລະຄອນ ເປັນສອງຝ່າຍຄື ຝ່າຍຊ້າຍ ແລະ ຝ່າຍຂວາ, ໂດຍຈັດໃຫ້ຜູ້ແທນໃໝ່ຈຳນວນ ໗໐ ຄົນ ໄດ້ນັ່ງຢູ່ເບື້ອງຂວາ. ແຕ່ປະທານ

ໂຮ່ຈີມິນຄັດຄ້ານການຈັດທີ່ນັ່ງໃຫ້ຜູ້ແທນດ້ວຍວິທີຢ່າງເດັດດ່ຽວ ເພາະວ່າເຮັດແນວນັ້ນ ຄ້າຍຄືກັບກອງປະຊຸມແຫ່ງຊາດຂອງມະຫາປະຕິວັດຝະລັ່ງ. ຕໍ່ຫນ້າການຂົ່ມຂູ່ຂອງພວກ ຮຸກຮານຕ່າງຊາດ ທີ່ນັບມື້ນັບເພີ່ມຂຶ້ນຈຸກໄຊ້ນັ້ນ ເພິ່ນປາຖະຫນາ ຢາກຈະຮັກສາກ້ອນ ຄວາມສາມັກຄີແຫ່ງຊາດໄວ້ ຢ່າງສຸດຄວາມສາມາດ. ຄວາມຄິດທີ່ວ່າ ຈຳເປັນຕ້ອງ ເຮັດສຸດກຳລັງຕົນ ເພື່ອຫລີກເວັ້ນບໍ່ໃຫ້ມີການກະທຳອັນໃດ ທີ່ອາດຈະນຳ ໄປສູ່ຄວາມ ແຕກແຍກກັນ ແລະ ຄວາມຂັດແຍ່ງກັນລະຫວ່າງຫວຽດມິນ ກັບອົງການຈັດຕັ້ງອື່ນໆແມ່ນ ຄວາມຄິດທີ່ໄດ້ເນັ້ນແລ້ວເນັ້ນອີກ ໃນທຸກໆບົດປາໄສ ແລະ ບົດຂ່າວຂອງເພິ່ນ. ເພິ່ນ ໄດ້ເວົ້າ ກ່ຽວກັບຄວາມສຳຄັນຂອງຄວາມເປັນເອກະພາບແຫ່ງຊາດ ຈາກເວທີຂອງ ກອງປະຊຸມຄົບຄະນະຂອງສະພາແຫ່ງຊາດເຊັ່ນດຽວກັນວ່າ:

" ສະພາແຫ່ງຊາດຂອງພວກເຮົາ ເປັນສັນຍາລັກຂອງຄວາມເປັນປຶກແຜ່ນແຫ່ງ ຊາດ. ພັກການເມືອງທັງຫມົດໃນປະເທດ ລ້ວນແຕ່ມີຜູ້ແທນຂອງຕົນຢູ່ທີ່ນີ້. ມີຜູ້ແທນ ຫລາຍຄົນບໍ່ຫນ້ອຍທີ່ບໍ່ສັງກັດພັກໃດ, ມີຕົວແທນໃຫ້ແກ່ແມ່ຍິງ ແລະຊົນເຜົ່າສ່ວນຫນ້ອຍ . ສະນັ້ນ, ຂ້າພະເຈົ້າຈຶ່ງມີຄວາມເຊື່ອຫມັ້ນຢ່າງຫນັກແຫນ້ນວ່າ ຜູ້ແທນທຸກຄົນຢູ່ທີ່ນີ້ ບໍ່ ແມ່ນຕົວແທນໃຫ້ແກ່ພັກໃດຫນຶ່ງ ຫລືອົງການຈັດຕັ້ງໃດຫນຶ່ງ ແຕ່ຫາກແມ່ນຕົວແທນ ໃຫ້ ແກ່ປະຊາຊົນຫວຽດນາມທັງຊາດ".

ກອງປະຊຸມຄົບຄະນະຂອງສະພາແຫ່ງຊາດ ໃນຕົວຈິງໄດ້ກາຍເປັນການພົບພໍ້ຄັ້ງ ທຳອິດຂອງປະທານໂຮ່ຈີມິນກັບຜູ້ແທນປະຊາຊົນ ພາຍຫລັງການສ້າງຕັ້ງ ສາທາລະນະ ລັດ ປະຊາທິປະໄຕ ຫວຽດນາມ. ການພົບພໍ້ຄັ້ງນີ້ດຳເນີນໄປ ຕໍ່ຫນ້າຜູ້ຖືກເຊີນ ເຂົ້າ ຮ່ວມກອງປະຊຸມຄົບຄະນະຄັ້ງນີ້ຢ່າງຫລວງຫລາຍ ຊຶ່ງມີທັງແຂກຕ່າງປະເທດ, ນັກຫນັງ ສືພິມ, ຜູ້ຕາງຫນ້າອົງການຈັດຕັ້ງມະຫາຊົນ. ພວກເຂົາເຈົ້າຫມົດທຸກຄົນ ສາມາດເຫັນ ດ້ວຍຕາຂອງຕົນເອງວ່າ ໂຮ່ຈີມິນ ໄດ້ຮັບຄວາມນິຍົມຊົມຊອບຢ່າງຫລວງຫລາຍ ຈົນ ເຖິງຂັ້ນໃດ ຢູ່ໃນປະເທດທີ່ມີອິດສະຫລະພາບ. ກິລິຍາທ່າທາງງ່າຍດາຍ ເຮັດໃຫ້ເກີດ ມີໄມຕີຕໍ່ເພິ່ນ, ຮອຍຍິ້ມແບບຄົນໃຈດີ ເປີດເຜີຍຂອງເພິ່ນ, ຄຳເວົ້າ ອັນຫນັກແຫນ້ນ ທັງຫມົດນີ້ໄດ້ສ້າງຄວາມຮູ້ສຶກຮັກແພງ, ສ້າງບັນຍາກາດແຫ່ງຄວາມສາມັກຄີ ຖານອ້າຍ ນ້ອງຂຶ້ນຢູ່ໃນຫ້ອງປະຊຸມ. ບໍ່ແມ່ນເລື່ອງງ່າຍທີ່ຈະບັນລຸສິ່ງດັ່ງກ່າວ ທ່າມກາງບັນດານັກ ການເມືອງ ທີ່ມີ ທັດສະນະທີ່ແຕກຕ່າງກັນທີ່ສຸດ, ໃນນັ້ນມີທັງຜູ້ແທນພັກຝ່າຍ ປະຕິການ ອີກດ້ວຍ. ເມື່ອຜູ້ແທນຄົນຫນຶ່ງສະເຫນີໃຫ້ສະພາແຫ່ງຊາດຕາງຫນ້າໃຫ້ປວງຊົນທັງຊາດ

ສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງ ລັດຖະບານຊົ່ວຄາວກ່ຽວກັບການເຄື່ອນໄຫວ ຂອງລັດຖະບານ, ທັງໄດ້ປະກາດວ່າ ປະທານໂຮ່ຈີມິນ ແມ່ນຜູ້ນຳທີ່ເຫມາະສົມຂອງປະເທດຫວຽດນາມໃຫມ່, ສຽງຕົບມືຊົມເຊີຍຢ່າງສຸດໃຈດັງຂຶ້ນທົ່ວຫ້ອງປະຊຸມ.

ທີ່ປະຊຸມໄດ້ເປັນເອກະສັນກັນຮັບຮອງເອົາຂໍ້ສະເຫນີແຕ່ງຕັ້ງ ປະທານໂຮ່ຈີມິນ ເປັນຫົວຫນ້າລັດຖະບານ ສ່ວນຫງວຽນຮາຍເຫິນ ຜູ້ຕາງຫນ້າ ຂອງສັນນິບາດປະຕິວັດຂອງຫວຽດນາມ ທີ່ບໍ່ມີຫນ້າເຂົ້າຮ່ວມກອງປະຊຸມຖືກແຕ່ງຕັ້ງເປັນຜູ້ຮອງ. ຫລັງຈາກປະທານໂຮ່ຈີມິນອ່ານຄຳປະຕິຍານເຂົ້າຮັບຕຳແຫນ່ງປະທານ ແລະ ນາຍົກລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມແລ້ວ ສະພາແຫ່ງຊາດ ກໍ່ຮັບຮອງເອົາລາຍຊື່ລັດຖະບານປະສົມ ແລະ ມະຕິພິເສດກ່ຽວກັບການມອບຫມາຍສິດອຳນາດ ອັນກວ້າງຂວາງໃຫ້ແກ່ລັດຖະບານ ເນື່ອງຈາກສະພາບການການທະຫານ–ການເມືອງອັນສັບສົນທີ່ເກີດຂຶ້ນ. ສະພາຍັງໄດ້ແຕ່ງຕັ້ງຄະນະກຳມະການປະຈຳ ເພື່ອປະຕິບັດຫນ້າທີ່ ຂອງອົງການສູງສຸດແຫ່ງອຳນາດລັດ ລະຫວ່າງສອງສະໄຫມປະຊຸມຂອງສະພາແຫ່ງຊາດ. ໃນຄະນະກຳມະການປະຈຳຕຳແຫນ່ງສຳຄັນທັງຫມົດ ລ້ວນແຕ່ຢູ່ໃນກຳມື ຂອງຜູ້ແທນຫວຽດມິນ.

ວຽກງານສະໄຫມປະຊຸມທຳອິດຂອງສະພາແຫ່ງຊາດສະແດງໃຫ້ເຫັນວ່າ ຄືດັ່ງປະທານໂຮ່ຈີມິນໄດ້ຄາດຄະເນໄວ້ແລ້ວ ເຖິງວ່າມີການປະນີປະນອມອັນໃຫຍ່ຫລວງ ກັບພັກຝ່າຍຂວາກໍຕາມ, ແຕ່ຫວຽດມິນກໍຍັງກຳຕະແຫນ່ງບັນຊາ ຢູ່ໃນກົງຈັກຂອງລັດ ຢ່າງຫນັກແຫນ້ນ ແລະ ນັກກອມມູນິດຜູ້ທີ່ເຄີຍຜ່ານຜ່າການທົດສອບມາ ກໍຍັງກຳບາງອົງເຂດສຳຄັນທີ່ສຸດຢູ່.

໖

ຍຸດໂທບາຍອັນບາກບົ່ນ ແລະ ອັນໄດ້ຜ່ານການຕຶກຕອງແລ້ວ ຂອງປະທານໂຮ່ຈີມິນ ແລະ ສູນກາງພັກກອມມູນິດອິນດູຈີນ ໄດ້ເກີດດອກອອກຜົນ ນັ້ນຄືໄພອັນຕະລາຍຈາກຝ່າຍຈຽງໄຄເຊັກ ຖືກກຳຈັດເທື່ອລະກ້າວ. ຍ້ອນວ່າສະພາບການ ຂອງພວກຈຽງໄຄເຊັກຢູ່ຈີນເອງກໍ່ບໍ່ດີປານໃດ, ສະນັ້ນພວກເຂົາຈຶ່ງຄ່ອຍໆອ່ຽງໄປຫາຄວາມຄິດ ໃຫ້

ຖອນທະຫານອອກຈາກພາກເໜືອຫວຽດນາມ. ແຕ່ວ່າການມາບອູ່ ທາງດ້ານການທະຫານ ຈາກຝ່າຍພວກລ່າເມືອງຂຶ້ນຝະລັ່ງ ຊ້ຳພັດຂຽວຂາດອັນຈຸກໄຊ.

ໃນຕອນທ້າຍເດືອນມັງກອນປີ ໑໙໔໖ ໂດຍພະຍາຍາມຫລີບຫລີກຈາກ ການແກ້ໄຂບັນຫາອິນດູຈີນ ຍິ່ງໄປກວ່ານັ້ນຍອມຕົກຢູ່ໃຕ້ຄວາມກົດດັນຂອງປະເທດຝະລັ່ງ ຜູ້ເປັນພັນທະມິດ, ສະນັ້ນປະເທດອັງກິດຈຶ່ງໄດ້ມອບ "ອຳນາດຕົນ" ຂອງຕົນຢູ່ອິນດູຈີນ ໃຫ້ແກ່ຝະລັ່ງ ແລ້ວຖອນກຳລັງທະຫານຂອງຕົນ ອອກຈາກພາກໃຕ້ຫວຽດນາມ.

ຕົກມາຮອດເວລານັ້ນ ທ່າທີຂອງອາເມລິກາກໍມີການປ່ຽນແປງຄືກັນ. ພາຍຫລັງມໍລະນະກຳຂອງ ຣູດສະແວນ ປະທານາທິບໍດີອາເມລິກາ, ທະຣູແມນ ກໍຂຶ້ນກຳອຳນາດແທນ. ເຂົາປະກາດເຫັນດີໃຫ້ກອງທັບ ແລະ ກົງຈັກບໍລິຫານຝະລັ່ງ ກັບຄືນມາຢູ່ອິນດູຈີນ. ຄົນອາເມລິກາມີທ່າທີທີ່ເຮັດໃຫ້ຈຽງໄຄເຊັກ ຊຶ່ງຂຶ້ນກັບອາເມລິກາ ດ້ານການທະຫານຢ່າງສົນເຊີງ ເຂົ້າໃຈວ່າ ພວກເຂົາຈະຕ້ອງຕົກລົງກັບຝະລັ່ງ ເພື່ອໃຫ້ກອງທັບສົ່ງນອກຂອງຝະລັ່ງ ເຂົ້າມາແທນທີ່ກອງທັບຈຽງໄຄເຊັກ ຢູ່ພາກເໜືອຫວຽດນາມ, ໂດຍບໍ່ເອົາຫົວຊາມຳຄວາມຈິງທີ່ວ່າ ການປົດອາວຸດກອງທັບຍີ່ປຸ່ນ ທີ່ຍອມຈຳນົນ ຢູ່ອິນດູຈີນ (ຊຶ່ງເປັນສາຍເຫດຂອງການບຽດຍຶດຢ່າງເປັນທາງການ) ໄດ້ສຳເລັດມາແຕ່ດົນນານແລ້ວ.

ໃນວັນທີ ໔໘ ຈູງແຮັງ ແຈ້ງຂ່າວວ່າ ຢູ່ນີ້ໄດ້ເຊັນສັນຍາ ຈີນ-ຝະລັ່ງ ກ່ຽວກັບການທີ່ທະຫານຈີນຈະຖອນອອກຈາກດິນແດນຫວຽດນາມ ແລະໃຫ້ກອງທັບຝະລັ່ງເຂົ້າມາແທນທີ່ ກ່ອນວັນທີ ໓໑ ເດືອນມີນາ ປີ ໑໙໔໖. ເພື່ອເປັນຄ່າທົດແທນໃຫ້ແກ່ການມອບພາກເໜືອຫວຽດນາມໃຫ້ຝະລັ່ງນັ້ນ ຝະລັ່ງເຫັນດີລົບລ້າງອະພິສິດເກົ່າຂອງຝະລັ່ງ ຢູ່ຈີນ, ສົ່ງດິນແດນກວາງເຈົາລວານຄືນໃຫ້ຈີນ, ອະນຸຍາດໃຫ້ຈີນມີອິດສະຫລະພາບ ໃນການອົນສົ່ງສິນຄ້າຜ່ານຫວຽດນາມໄປຈີນ, ມອບ "ເຂດອິດສະຫລະ" ຢູ່ໄຮຟອງໃຫ້ຈີນ ແລະ ຮັບປະກັນອະພິສິດຈຳນວນຫລວງຫລາຍ ສຳລັບຊາວຈີນຕ່າງດ້າວຢູ່ຫວຽດນາມ.

ສົນທິສັນຍາລະຫວ່າງຈຽງໄຄເຊັກ ກັບ ພວກລ່າເມືອງຂຶ້ນຝະລັ່ງ ໄດ້ເຮັດໃຫ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຕົກຢູ່ໃນສະພາບສັບສົນທີ່ສຸດ. ປະທານໂຮ່ຈີມິນ ແລະ ເພື່ອນຮ່ວມຮົບຂອງເພິ່ນ ເຫັນວ່າຝະລັ່ງມີຂໍ້ອ້າງອີງອັນ " ຖືກຕ້ອງຕາມກົດໝາຍ " ເພື່ອຣຸກຮານ ແລະ ຟື້ນຟູການປົກຄອງແບບລ່າເມືອງຂຶ້ນຂອງມັນ ຢູ່ເທິງດິນແດນຫວຽດນາມ. ເໝືອນດັ່ງທີ່ເຫດການ ທີ່ເກີດຂຶ້ນຢູ່ນາມໂບຊຸໃຫ້ເຫັນວ່າ ,

ເປັນອັນແນ່ນອນວ່າ, ພວກລ່າເມືອງຂຶ້ນຝະລັ່ງຈະເຮັດທຸກສິ່ງທຸກຢ່າງ ເພື່ອລົບລ້າງຫມາກຜົນຂອງການປະຕິວັດຫວຽດນາມ. ສາທາລະນະລັດ ຫນຸ່ມນ້ອຍ ຕ້ອງປະເຊີນຫນ້າກັບທາງເລືອກສອງທາງຄື: ເຮັດສົງຄາມຢ່າງກະທັນຫັນກັບສັດຕູຜູ້ເຂັ້ມແຂງ ໂຕຫນຶ່ງ ຫລືວ່າ ເຈລະຈາ ແລະຊອກຫາວິທີປະນິປະນອມທາງການເມືອງ ຊຶ່ງທັງສອງຝ່າຍພໍຈະຮັບເອົາໄດ້ໃນໄລຍະຊົ່ວຄາວ.

ເພື່ອຊີ້ໃຫ້ເຫັນວ່າ ຊ່ວງເວລາທີ່ຕ້ອງຕັດສິນຊາຕາກຳຂອງການປະຕິວັດນັ້ນແມ່ນຊ່ວງເວລາທີ່ຫນ້າເສົ້າສະຫລົດໃຈເຖິງພຽງໃດ ອາດຈະຍົກເອົາວາລະປະຊຸມ ຄັ້ງຫນຶ່ງຂອງລັດຖະບານປະສົມຊົ່ວຄາວຂຶ້ນມາເພື່ອພິສູດສິ່ງດັ່ງກ່າວນີ້. ເມື່ອປະທານ ໂຮ່ຈີມິນ ເວົ້າກ່ຽວກັບຄວາມຈຳເປັນຕ້ອງມີການປະນິປະນອມກັບພວກລ່າເມືອງຂຶ້ນຝະລັ່ງ, ພວກທີ່ຄັດຄ້ານແນວຄິດດັ່ງກ່າວ ໄດ້ສະເຫນີຂຶ້ນທັນທີທັນໃດໂລດວ່າ ເຫັນດີໃຫ້ທະຫານຈຽງໄຄເຊັກເຂົ້າມາ ເພື່ອສະກັດກັ້ນບໍ່ໃຫ້ພວກລ່າເມືອງຂຶ້ນຝະລັ່ງ ກັບຄືນມາຫວຽດນາມ. ບັນຍາກາດຢູ່ໃນກອງປະຊຸມເຄັ່ງຕຶງສຸດຂະຫນາດ. ການຖົກຖຽງເລີ່ມມີ ລັກສະນະເຜັດຮ້ອນທີ່ສຸດ. ຍ້ອນແນວນັ້ນ ປະທານໂຮ່ຈີມິນ ຈຶ່ງຂໍສະເຫນີຄຳເຫັນອີກວ່າ:

" ພວກທ່ານທັງຫລາຍເຂົ້າໃຈບໍ່ວ່າຈະເກີດຫຍັງຂຶ້ນ ຖ້າກອງທັບຈຽງໄຄເຊັກບໍ່ຖອນອອກ? ພວກທ່ານລືມປະຫວັດສາດຂອງປະເທດເຮົາຜ່ານມາວ່າເປັນຄືແນວໃດ?ຖ້າວ່າຈີນມາຢູ່ແລ້ວ, ພວກເຂົາຈະຢູ່ເປັນພັນໆປີ. ສ່ວນກອງທັບຝະລັ່ງ...ພວກເຂົາເຈົ້າຈະສາມາດປົກຄອງຢູ່ ພຽງແຕ່ເວລາຊົ່ວຄາວເທົ່ານັ້ນ ສຸດທ້າຍ ເຖິງແນວໃດ ກໍຕ້ອງຖອນອອກ...ແຕ່ຖ້າວ່າພວກຈີນຍັງຢູ່, ແນ່ນອນວ່າ ພວກເຂົາຈະບໍ່ຖອນອອກຈັກເທື່ອ."

ພໍແຕ່ຄະນະນຳພາຫວຽດມິນ ເລີ່ມເວົ້າເຖິງຄວາມຈຳເປັນຕ້ອງເຈລະຈາ ຢ່າງເປັນທາງການກັບພວກຝະລັ່ງເທົ່ານັ້ນ ສຽງສະແດງຄວາມຄັດຄ້ານ ໄດ້ດັງສະຫນັ່ນຂຶ້ນຢູ່ທຸກແຈ. ພິເສດບັນດານັກເຄື່ອນໄຫວຂອງສັນນິບາດປະຕິວັດຂອງຫວຽດນາມ ແລະ ພັກຄະນະຊາດຫວຽດນາມ ແມ່ນຝ່າຍທີ່ຄັດຄ້ານຢ່າງເດັດຂາດ, ພວກເຂົາເຈົ້າສວມບົດບາດເປັນນັກປະຕິວັດທີ່ແທ້ຈິງ. ຫນັງສືພິມ ແລະ ວິທະຍຸຂອງພວກເຂົາປຸກລະດົມມະຫາຊົນ ດ້ວຍຄຳຂວັນທີ່ມີລັກສະນະຊ້າຍຈັດທີ່ສຸດວ່າ "ບໍ່ເຈລະຈາກັບໃຜຫມົດ!", "ຊະນະຫລືຕາຍ!". ເປົ້າຫມາຍແທ້ຈິງຂອງນັກເຄື່ອນໄຫວດັ່ງກ່າວ ບໍ່ແມ່ນຄວາມລັບ: ທຳລາຍວິທີແກ້ໄຂທາງການເມືອງກັບຝະລັ່ງ, ຍູ້ລັດຖະບານໃຫ້ຕົກຢູ່ໃນສະພາວະ ຕ້ອງເຄື່ອນໄຫວຢ່າງຟ້າວຟັ່ງ ແລະ ສ່ຽງໄພ, ແລວເມື່ອມີໂອກາດອັນເຫມາະສົມ ກໍເຮັດ

ລັດຖະປະຫານຢູ່ຮ່າໂນ້ຍ. ພ້ອມດຽວກັນນັ້ນ ຍັງມີຄົນຈຳນວນໜຶ່ງໃນຫວຽດມິນ ແລະ ໃນພັກກອມມູນິດອິນດູຈີນ ທີ່ຄັດຄ້ານກ່ຽວກັບການເຈລະຈາກັບຝະລັ່ງ. ໂດຍປະຕິບັດຕາມອາລົມ, ຄົນຈຳພວກນີ້ ຈຶ່ງຖືວ່າການເຈລະຈາໃດໆກໍຕາມ ກັບພວກກົດຂີ່ຂູດຮີດປະຊາຊົນຫວຽດນາມມາຕັ້ງເປັນສະຕະວັດ ລ້ວນແຕ່ແມ່ນການທໍລະຍົດຕໍ່ພາລະກິດປະຕິວັດ.

ໃນຊຸມມື້ດັ່ງກ່າວນັ້ນ ໂຮ່ຈີມິນຄິດຫລາຍທີ່ສຸດ ກ່ຽວກັບບັນຫາທີ່ວ່າ ມີທາງເລືອກອື່ນອັນໜຶ່ງບໍ ທີ່ສາມາດຈະຮັບເອົາໄດ້ ນອກຈາກການເຮັດສົງຄາມກັບຝະລັ່ງ.ເໝືອນດັ່ງທີ່ຜ່ານມາ ເພິ່ນອີງໃສ່ບົດຮຽນອັນລ້ຳຄ່າຂອງເລນິນຢູ່ສະເໝີ. ເພິ່ນຮູ້ວ່າການປະຕິວັດຫວຽດນາມຕົກຢູ່ໃນສະພາວະການ ທີ່ຄ້າຍຄືກັນຢ່າງໜ້າແປກປະຫລາດ ກັບສະໄໝໜຶ່ງໃນປະຫວັດສາດຂອງປະເທດລັດເຊຍໂຊວຽດ, ສະໄໝທີ່ເລນິນ ແລະ ເພື່ອນຮ່ວມຮົບຂອງເພິ່ນຕໍ່ສູ້ທວງໃຫ້ເຊັນສົນທິສັນຍາສັນຕິພາບໃນທັນທີກັບເຢຍລະມັນ. ໃນເວລານັ້ນກຳລັງຝືນປະຕິວັດທັງໝົດນັບແຕ່ພວກແມນເຊວິກ ແລະພວກສັງຄົມນິຍົມ-ປະຕິວັດຈົນຮອດພວກທະຫານຂາວ ລ້ວນແຕ່ໂຄສະນາຢ່າງປ່ອງບ້າ ຕ້ານສົນທິສັນຍາສັນຕິພາບ. ພັນທະມິດຂອງພວກເຂົາໃນວຽກງານຊົ່ວຮ້າຍດັ່ງກ່າວ ແມ່ນໂຕຣຊະກີ ແລະ ພວກທີ່ເອີ້ນວ່າ "ນັກກອມມູນິດອຽງຊ້າຍ". ພາຍໃນພັກ ເຂົາເຈົ້າດຳເນີນການຕໍ່ສູ້ຢ່າງຮ້າຍແຮງຕ້ານເລນິນ ແລະ ທວງໃຫ້ສືບຕໍ່ທຳສົງຄາມ. ແນວທາງນະໂຍບາຍ ແບບທາທາຍດັ່ງກ່າວ ໄດ້ຖືກປົດບັງຢ່າງຄ່ອງແຄ້ວ ດ້ວຍຖ້ອຍຄຳປະຕິວັດ. ໂຕຣຊະກີ ເປັນຫົວໜ້າຄະນະຜູ້ແທນໂຊວຽດຢູ່ ບະແຣັດ. ໂດຍຂັດກັບຄຳຊີ້ນຳຂອງຄະນະບໍລິຫານງານສູນກາງນັ້ນ, ໂຕຣຊະກີ ໄດ້ປະກາດບໍ່ຍອມເຊັນສົນທິສັນຍາສັນຕິພາບ ຕາມເງື່ອນໄຂ ທີ່ຝ່າຍເຢຍລະມັນເປັນຜູ້ສະເໜີ, ເຮັດແນວນັ້ນແມ່ນໂຕຣຊະກີປ່ອຍໃຫ້ກອງທັບເຢຍລະມັນບຸກໂຈມຕີແລະບຽດຍຶດເອົາເຂດອັນກວ້າງໃຫຍ່ຂອງສາທາລະນະລັດໂຊວຽດ.ເຖິງແມ່ນວ່າເງື່ອນໄຂສັນຕິພາບ ເຊິ່ງພວກເຢຍລະມັນໄດ້ສະເໜີໃນເວລາເຈລະຈາ ຮອບທີສອງແມ່ນໜັກໜ່ວງກວ່າກໍຕາມ ແຕ່ວ່າ ເລນິນກໍຍັງຢືນຢັນໃຫ້ເຊັນສົນທິສັນຍາສັນຕິພາບອັນອັບອາຍຂາຍໜ້າດັ່ງກ່າວຢ່າງເດັດດ່ຽວໃນທັນທີ. ປະທານໂຮ່ຈີມິນ ຍັງຈົດຈຳຄຳເວົ້າອັນສະຫລາດສ່ອງໃສຂອງເລນິນວ່າ: " ເງື່ອນໄຂສົນທິສັນຍາສັນຕິພາບໜັກໜ່ວງສຸດຂະໜາດ, ແຕ່ເຖິງຢ່າງໃດກໍຕາມ ປະຫວັດສາດກໍຈະເປັນຜູ້ຕັດສິນ... ເຖິງແມ່ນວ່າຈະມີການທົດສອບໃດໆກໍຕາມ, ແນ່ນອນວ່າອະນາຄົດຈະເປັນຂອງພວກເຮົາ"*. ປະ

---

* ວ.ອີ. ເລນິນ. ນິພົນຄົບຊຸດ, ເຫລັ້ມ ໓໕, ໜ້າ ໓໘໓. (ເປັນພາສາລັດເຊຍ)

ຫວັດສາດໄດ້ຢັ້ງຢືນຄວາມປີຊາສາມາດຂອງເລນິນ.

ປະທານໂຮ່ຈີມິນອ່ານປະໂຫຍກອັນແກ່ນເຄີຍຊ້ຳແລ້ວຊ້ຳອີກໃນປຶ້ມຮຽນ " ປະຫວັດສາດໂດຍຫຍໍ້ຂອງພັກກອມມູນິດ (ໂບນເຊວິກ) ແຫ່ງສະຫະພາບໂຊວຽດ" ... "ໃນສະໄໝການປະຕິວັດເດືອນຕຸລາ ເລນິນໄດ້ສອນໃຫ້ພັກໂບນເຊວິກ ຮູ້ຈັກບຸກໂຈມຕີຢ່າງອາດຫານ ແລະ ເດັດດ່ຽວຄືແນວໃດ ເມື່ອມີເງື່ອນໄຂອັນຈຳເປັນ ເພື່ອເຮັດວຽກດັ່ງກ່າວ. ໃນສະໄໝເຊັນສັນທິສັນຍາສັນຕິພາບ ບະແຣັດ ວ.ອີ.ເລນິນ ພັດສອນໃຫ້ພັກ ຮູ້ຈັກຖອຍຢ່າງເປັນລະບຽບຄືແນວໃດ ເມື່ອກຳລັງສັດຕູເຂັ້ມແຂງກວ່າກຳລັງ ປະຕິວັດ ເພື່ອຮັກສາກຳລັງແຮງໄວ້ໃຫ້ແກ່ການບຸກໂຈມຕີສັດຕູຄັ້ງໃໝ່".

ບົດຮຽນອັນລ້ຳຄ່າຂອງເລນິນໄດ້ຊ່ວຍໃຫ້ປະທານໂຮ່ຈີມິນ ແລະ ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ເລືອກເຟັ້ນເອົາແນວທາງຍຸດໂທບາຍອັນຖືກຕ້ອງ ທີ່ສຸດ, ທີ່ແທດເໝາະກັບການຊັ່ງຊາກຳລັງທີ່ມີຢູ່ນັ້ນ. ນັ້ນຄືການຜ່ອນສັ້ນຜ່ອນຍາວ ຢ່າງສົມເຫດສົມຜົນກັບສັດຕູ, ຊອກຫາວິທີທາງປະນີປະນອມ,ເຮັດແນວນີ້ແມ່ນເພື່ອກູ້ເອົາອຳນາດຂອງປະຊາຊົນໃຫ້ພົ້ນຈາກການຖືກດັບສູນ ແລະຍາດແຍ່ງເອົາເວລາເພື່ອຮວບຮວມກຳລັງ ແລະ ກະກຽມໃຫ້ແກ່ການສູ້ຮົບຄັ້ງສຸດທ້າຍ ຕ້ານພວກລ່າເມືອງຂຶ້ນ.

ໃນວັນທີ ໘ ເດືອນມີນາ ຄະນະປະຈຳສູນກາງພັກ ຮັບຮອງເອົາຄຳແນະນຳໂດຍແມ່ນປະທານໂຮ່ຈີມິນເປັນຜູ້ຮ່າງອອກ ກ່ຽວກັບສະພາວະການປະຈຸບັນ ທາງດ້ານການເມືອງ ແລ້ວສົ່ງໄປຫາສະມາຊິກຂອງພັກ.

ຫລັກໝັ້ນທີ່ໄດ້ລະບຸໄວ້ຢູ່ໃນຄຳແນະນຳກໍແມ່ນວ່າ ໃນເວລາດຳເນີນການເຈລະຈາກັບຝະລັ່ງນັ້ນ ຕ້ອງຊອກຫາວິທີທາງ ເພື່ອໃຫ້ຝະລັ່ງຮັບຮູ້ເອກະລາດຂອງຫວຽດນາມ ແລະ ຂະນະດຽວກັນ ກໍຕ້ອງຮັກສາສາຍພົວພັນໄວ້ກັບອະດີດເມືອງແມ່ ຖ້າວ່າຄວາມອາດສາມາດດັ່ງກ່າວຫາກປະກົດຕົວຂຶ້ນ. ສິ່ງສຳຄັນ ຄືຫວງໃຫ້ຝະລັ່ງຕ້ອງຮັບຮູ້ສິດຂອງປະຊາຊົນຫວຽດນາມ ໃນການຕັດສິນດ້ວຍຕົນເອງ ແລະ ຮັກສາຄວາມເປັນເອກະພາບຂອງປະເທດຊາດ. ໃນກໍລະນີດັ່ງກ່າວ ຝ່າຍຫວຽດນາມອາດຈະເຫັນດີ ໃຫ້ກອງທັບຝະລັ່ງເຂົ້າບັກໂບເປັນເວລາຊົ່ວຄາວ ເພື່ອສັບປ່ຽນກອງທັບຈຽງໄຄເຊັກ, ພາຍໃຕ້ເງື່ອນໄຂອັນເດັດຂາດທີ່ວ່າ ກອງທັບຝະລັ່ງຈະຕ້ອງຢູ່ໃນຫວຽດນາມ ໃນກຳນົດເວລາທີ່ຈຳກັດເທົ່ານັ້ນ. ຄຳແນະນຳເນັ້ນໜັກວ່າອັນສຳຄັນ ແມ່ນຕ້ອງເຮັດແນວໃດເພື່ອໃຫ້ "ໃນເວລາທີ່ມີການເຈລະຈາກັບຝະລັ່ງນັ້ນ ຕ້ອງບໍ່ຢຸດເຊົາວຽກງານກະກຽມສົງຄາມກໍ້ຕາມຢ່າງ

ເດັດຂາດ ແມ່ນແຕ່ນາທີດຽວ ຍິ່ງໄປກວ່ານັ້ນຍັງຕ້ອງເລັ່ງລັດການກະກຽມດັ່ງກ່າວ. ບໍ່ຄວນປະປ່ອຍໃຫ້ການເຈລະຈາກັບຝະລັ່ງບັ່ນທອນນ້ຳໃຈເດັດດ່ຽວສູ້ຣົບຂອງຊາດເຮົາ".

ໃນວັນທີ ໕ ເດືອນມີນາ, ກອງປະຊຸມເປີດກວ້າງຂອງຄະນະປະຈຳສູນກາງພັກເຫັນດີເຫັນພ້ອມນຳການເຊັນສັນຍາແບບປະນີປະນອມກັບຝະລັ່ງ. ມື້ລຸນມາ ພິທີເຊັນ "ຂໍ້ຕົກລົງຂັ້ນຕົ້ນລະຫວ່າງຫວຽດນາມກັບຝະລັ່ງ" ຢ່າງເປັນທາງການ ດຳເນີນຢູ່ໃນຕຶກສວຍງາມແຫ່ງໜຶ່ງ ຊຶ່ງຕັ້ງຢູ່ໃນເຂດຊຶ່ງເມື່ອກ່ອນຄົນເອີລົບອາໄສຢູ່. ຜູ້ມີໜ້າໃນພິທີເຊັນສັນຍາ ນອກຈາກສະມາຊິກລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຍັງມີນາຍທະຫານຝະລັ່ງ, ຜູ້ຕາງໜ້າກອງບັນຊາການກອງທັບຈຽງໄຄເຊັກ, ຜູ້ຕາງໜ້າຄະນະທູດອາເມລິກາ ແລະ ກົງສູນອັງກິດ. ແມ່ນຄົນຈຳພວກນີ້ເອງ ທີ່ໄດ້ຢືນອ້ອມປະທານໂຮ່ຈີມິນຢ່າງແໜ້ນໜາ ໃນເວລາທີ່ເພິ່ນເຊັນຊື່ໃນຂໍ້ຕົກລົງ ແລະ ບັນທຶກເພີ່ມເຕີມ. ສຳລັບຄົນອື່ນ ຮູບພາບນີ້ເປັນສັນຍາລັກອັນຈະແຈ້ງ ແຫ່ງສະພາບການ ອັນໜັກໜ່ວງທີ່ສຸດຂອງສາທາລະນະລັດຫວຽດນາມໜຸ່ມນ້ອຍ ເຊິ່ງຖືກພວກຈັກກະພັດ ປິດລ້ອມທຸກດ້ານໃນສະໄໝນັ້ນ.

ຂໍ້ຕົກລົງຂັ້ນຕົ້ນ ຊີ້ໃຫ້ເຫັນວ່າ: "ລັດຖະບານຝະລັ່ງຮັບຮູ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມວ່າ ເປັນປະເທດໜຶ່ງທີ່ມີອິດສະຫລະພາບ, ມີລັດຖະສະພາ,ມີກອງທັບ, ການເງິນຂອງຕົນ". ສ່ວນຝ່າຍ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມເຫັນດີເຂົ້າເປັນສະມາຊິກ "ສະຫະພັນອິນດູຈີນ ແລະ ກຸ່ມພັນທະພາບ ຝະລັ່ງ ". ກ່ຽວກັບອະນາຄົດຂອງນາມໂບນັ້ນ, ຂໍ້ຕົກລົງບົ່ງວ່າ: "ລັດຖະບານຝະລັ່ງສັນຍາວ່າຈະປະຕິບັດຕາມຂໍ້ຕົກລົງ ທີ່ປະຊາຊົນຫວຽດນາມໄດ້ຮັບເອົາໃນເວລາລົງປະຊາມະຕິ".

ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເຫັນດີໃຫ້ກອງທັບຝະລັ່ງ ເຂົ້າພາກເໜືອຫວຽດນາມເປັນການຊົ່ວຄາວ ແທນກອງທັບຈຽງໄຄເຊັກ. ໃນບັນທຶກເພີ່ມເຕີມໄດ້ລະບຸເງື່ອນໄຂໄວ້ວ່າ ກອງທັບຈຽງໄຄເຊັກຈະຖືກປ່ຽນແທນດ້ວຍກຳລັງ ປະສົມຝະລັ່ງກັບຫວຽດນາມ (ທະຫານຫວຽດນາມ ໑໐.໐໐໐ ຄົນ ແລະ ທະຫານ ຝະລັ່ງ ໑໕.໐໐໐ ຄົນ) ພາຍໃຕ້ການບັນຊາລວມຂອງຝະລັ່ງ, ແຕ່ "ມີການເຂົ້າຮ່ວມ ຂອງຜູ້ຕາງໜ້າຫວຽດນາມ".

ຊາກ ແຊັງຕານີ ຜູ້ຖືກມອບໝາຍໜ້າທີ່ໃຫ້ເປັນ "ຂ້າຫລວງຂອງຝະລັ່ງ ຢູ່ບັກໂບ" ເປັນຜູ້ຕາງໜ້າປະເທດຝະລັ່ງ ໃນການເຈລະຈາກັບປະທານໂຮ່ຈີມິນ ແລະ ກັບ

ຜູ້ຕາງໜ້າອື່ນໆຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ການເຈລະຈາດັ່ງກ່າວພາໄປເຖິງການເຊັນຂໍ້ຕົກລົງຂັ້ນຕົ້ນ. ຫລາຍປີຕໍ່ໆມາໃນປຶ້ມ "ເລື່ອງສັນຕິພາບ ທີ່ຖືກມ້າງເພ" ເຂົາໄດ້ຂຽນວ່າ: "ພາຍຫລັງການພົບພໍ້ກັບ ໂຮ່ຈີມິນຄັ້ງທຳອິດ, ຂ້າພະເຈົ້າມີຄວາມຮູ້ສຶກວ່າ ຄົນຜູ້ບຳເພັນຕົນຄືໂຍຄີຜູ້ນີ້, ຊຶ່ງມີໃບໜ້າທີ່ມີແວວສະຫລາດມີປັນຍາ, ມີພະລັງ, ແລະ ມີປະຕິພານ ແມ່ນຄົນໜຶ່ງທີ່ດີເດັ່ນຈົນວ່າຫາຍາກທີ່ສຸດ ແລະໃນອະນາຄົດບໍ່ໄກນີ້ ບຸກຄົນຜູ້ນີ້ແນ່ນອນວ່າຈະກຳຖານະພົ້ນເດັ່ນຂຶ້ນ ບົນເວທີການເມືອງ ຢູ່ທະວີບອາຊີ... ລະດັບວັດທະນະທຳອັນສູງ, ສະຕິປັນຍາເປັນເລີດ, ຄວາມດຸໝັ່ນໃນການອອກແຮງງານຢ່າງບໍ່ຮູ້ອິດຮູ້ເມື່ອຍ, ຄວາມບໍ່ເຫັນແກ່ສ່ວນຕົວຂອງປະທານໂຮ່ຈີມິນ ເຮັດໃຫ້ເພິ່ນຊະນະຈິດໃຈປະຊາຊົນ ຢ່າງບໍ່ເຄີຍມີມາກ່ອນ. ໜ້າເສຍດາຍ ທີ່ປະເທດຝະລັ່ງຕີລາຄາຄົນຜູ້ນີ້ບໍ່ຖືກ, ບໍ່ເຂົ້າໃຈເຖິງບົດບາດຂອງເພິ່ນ ກໍ່ຄືກຳລັງ ຊຶ່ງບຸກຄົນດັ່ງກ່າວເປັນຕົວແທນ".

ການເຊັນສັນຍາກັບຝະລັ່ງ ໄດ້ສ້າງປະຕິກິລິຍາອັນແຕກຕ່າງກັນຂຶ້ນ ຢູ່ພາຍໃນປະເທດ. ແມ່ນແຕ່ຢູ່ພາຍໃນພັກເອງກໍ່ບໍ່ແມ່ນວ່າໝົດທຸກຄົນຈະເຂົ້າໃຈ ເຖິງຄວາມຈຳເປັນຂອງບາດກ້າວເດີນດັ່ງກ່າວ. ພວກປະຕິການ ແລະ ພວກອຽງ "ຊ້າຍ" ເກີດຄວາມໂມໂຫທີ່ສຸດ. ພວກເຂົາປ່ອຍຂ່າວເລົ່າລື ໃນໝູ່ປະຊາຊົນວ່າ ໂຮ່ຈີມິນ ຄືຈັ່ງວ່າ ເປັນນັກສືບຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ໄດ້ຂາຍເອກະລາດ ຊຶ່ງຫວຽດນາມຍາດມາໄດ້ໃຫ້ຝະລັ່ງ. ຕໍ່ປະກົດການດັ່ງກ່າວ ຈຳເປັນຕ້ອງດຳເນີນການອະທິບາຍ ຢ່າງກວ້າງຂວາງ ໃນໝູ່ປະຊາຊົນຢ່າງຮີບດ່ວນ.

ມາດຕະການສຳຄັນໃນຂັ້ນໂຄສະນາດັ່ງກ່າວ ແມ່ນການໂຮມຊຸມນຸມມິດຕິງຂອງມະຫາຊົນ ຢູ່ສະໜາມໂຮງລະຄອນແຫ່ງຊາດຮ່າໂນ້ຍ. ຜູ້ກ່າວຄຳປາໄສກ້າວຂຶ້ນເວທີຕໍ່ໆກັນ, ນັ້ນຄືນັກເຄື່ອນໄຫວຜູ້ມີຊື່ສຽງຂອງລັດຖະບານ ແລະ ຫວຽດມິນ. ເຂົາເຈົ້າອະທິບາຍໃຫ້ຊາວຮ່າໂນ້ຍເປັນຫລາຍໝື່ນຄົນ ທີ່ມາໂຮມກັນທີ່ສະໜາມຫລວງ ໄດ້ເຂົ້າໃຈວ່າເປັນດ້ວຍເຫດຜົນຫຍັງ ຈຶ່ງຈຳເປັນຕ້ອງເຊັນຂໍ້ຕົກລົງຂັ້ນຕົ້ນ.

ຄົນເຫລົ່ານັ້ນກ່າວວ່າ ຫວຽດນາມບໍ່ຕ້ອງການໃຫ້ມີກອງທັບຕ່າງປະເທດໃດໆຕັ້ງຢູ່ເທິງດິນແດນຂອງຕົນ, ແຕ່ພັນທະມິດອັງກິດ ກັບອາເມລິກາ ໄດ້ບັງຄັບໃຫ້ຫວຽດນາມ

ຕ້ອງຮັບເອົາກອງທະຫານດັ່ງກ່າວ. ເມື່ອເປັນດັ່ງນັ້ນ ກໍ່ຈຳເປັນຕ້ອງປ່ອຍໃຫ້ ທະຫານຝະລັ່ງສິບພັນກວ່າຄົນມາຕັ້ງທັບຢູ່ຫວຽດນາມພາກເໜືອ, ເຮັດແນວນັ້ນພວກເຮົາຈະສາມາດຍູ້ທະຫານຈຽງໄຄເຊັກທີ່ມີຈຳນວນພົນເຖິງ ໒໐໐ ພັນຄົນອອກໜີຈາກພວກເຮົາ . ພາຍລູນມາ ຄືດັ່ງທີ່ໄດ້ເຊັນກັນໃນຂໍ້ຕົກລົງຂັ້ນຕົ້ນ ກອງທັບຝະລັ່ງຈະຕ້ອງຖອນອອກຈາກຫວຽດນາມ. ອີງໃສ່ການຕໍ່ສູ້ຢ່າງພິລະອາດຫານຂອງປະຊາຊົນ, ລັດຖະບານຝະລັ່ງຈຳຕ້ອງຮັບຮູ້ຫວຽດນາມວ່າແມ່ນ "ປະເທດໜຶ່ງທີ່ມີອິດສະຫລະພາບ". ນັ້ນແມ່ນບາດກ້າວເດີນໄປຂ້າງໜ້າ ຖ້າສົມທຽບໃສ່ "ລະບອບປົກຄອງຕົນເອງ" ຂອງເດີໂກນ. ປະຈຸບັນຈຳເປັນຕ້ອງກ້າວເດີນໄປໄກກວ່ານັ້ນອີກ, ຕ້ອງບັນລຸເອກະລາດໃຫ້ໄດ້ຢ່າງສົມບູນ. ຝະລັ່ງຕ້ອງຕົກລົງໃຫ້ມີການລົງປະຊາມະຕິ ກ່ຽວກັບບັນຫາການເຕົ້າໂຮມສາມພາກຂອງປະເທດຫວຽດນາມເຂົ້າກັນ ແລະ ຕ້ອງໃຫ້ສັນຍາວ່າຈະຮັບຮູ້ໝາກຜົນຂອງການລົງປະຊາມະຕິດັ່ງກ່າວ. ນາມໂບຈະຕ້ອງຖືກສົ່ງຄືນໃຫ້ປະເທດຊາດ. ເພື່ອນຮ່ວມຊາດຕ້ອງຮັດແໜ້ນຖັນແຖວ ເພາະວ່າການສູ້ຮົບຫາກໍເລີ່ມຕົ້ນ.

ປະທານໂຮ່ຈີມິນກ່າວຄຳປາໄສໃນງານໂຮມຊຸມນຸມມິດຕິງ, ເພິ່ນກ່າວວ່າ:

" ແຕ່ເດືອນສິງຫາປີ ໑໙໔໕ ປະເທດເຮົາໄດ້ກາຍເປັນປະເທດໜຶ່ງ ທີ່ມີອິດສະຫລະພາບ. ເຖິງຢ່າງໃດກໍຕາມ ມາຮອດປະຈຸບັນ ຍັງບໍ່ມີມະຫາອຳນາດຕົວໃດ ຮັບຮູ້ເອກະລາດຂອງພວກເຮົາ. ການເຈລະຈາກັບຝະລັ່ງ ໄດ້ເປີດຊ່ອງທາງເຮັດໃຫ້ ສາກົນຮັບຮູ້ປະເທດຂອງເຮົາ, ເຮັດໃຫ້ທີ່ຕັ້ງຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໝັ້ນຄົງຂຶ້ນກວ່າເກົ່າ ຢູ່ເທິງເວທີສາກົນ. ຂໍ້ຕົກລົງແມ່ນໄຊຊະນະໃຫຍ່ທາງດ້ານການເມືອງ. ພວກເຮົາໄດ້ກາຍເປັນຊາດໜຶ່ງທີ່ມີອິດສະຫລະພາບ. ອີງຕາມຂໍ້ຕົກລົງນັ້ນ, ທະຫານຝະລັ່ງຈະຕ້ອງຖອນອອກຈາກຫວຽດນາມເປັນຊຸດໆ. ເພື່ອຮ່ວມຊາດຕ້ອງອຸ່ນອ່ຽນ, ຕ້ອງປະຕິບັດລະບຽບວິໄນ ແລະ ຮັດແໜ້ນຄວາມສາມັກຄີ ໃຫ້ແໜ້ນໜາກວ່າເກົ່າ.

ເພິ່ນເຊົາເວົ້າບຶດດຽວ ບັດແລ້ວເວົ້າຕໍ່ດ້ວຍນ້ຳສຽງທຸ່ມທ່ຽງແຕ່ເດັດດ່ຽວວ່າ :

"ຂ້າພະເຈົ້າ ໂຮ່ຈີມິນ, ຊົ່ວຊີວິດນີ້ໄດ້ສູ້ຮົບຮ່ວມກັບເພື່ອນຮ່ວມຊາດ ເພື່ອເອກະລາດຂອງປະເທດຊາດ. ຂ້າພະເຈົ້າຍອມເສຍສະຫລະຊີວິດ ດີກວ່າຈະທໍລະຍົດຕໍ່ພາລະກິດຂອງຊາດ".

ທົ່ວສະໜາມຫລວງມິດງຽບ ໄດ້ຍິນແຕ່ສຽງຫາຍໃຈຂອງແຕ່ລະຄົນ, ມີຫລາຍ

ຄົນນ້ຳຕາຍ້ອຍໜ້າ ຢ່າງບໍ່ຮູ້ສຶກຕົວ. ຄຳປາໄສຂອງປະທານດັງກ້ອງກັງວານ ເໝືອນດັ່ງຄຳປະຕິຍານວ່າຈະຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ປະຊາຊົນ ໃນເວລາແຫ່ງການທົດສອບ. ເມື່ອປະທານໂຮ່ຈີມິນເວົ້າຈົບລົງ ທຸກຄົນຊູກຳປັ້ນຂຶ້ນທັງໂຮຮ້ອງດັງກ້ອງທົ່ວສະໜາມຫລວງ: "ເດັດດ່ຽວປະຕິບັດທຸກຄຳຊີ້ນຳຂອງລັດຖະບານ ແລະ ປະທານໂຮ່ຈີມິນ !", "ປະທານໂຮ່ຈີມິນ ໝັ້ນຍືນ !".

ສອງວັນຫລັງຈາກການເຊັນຂໍ້ຕົກລົງຂັ້ນຕົ້ນ, ປະທານໂຮ່ຈີມິນຕ້ອນຮັບຜູ້ ບັນຊາການກອງທະຫານລາດກອງຫລອນຂອງເມືອງຮ່າໂນ້ຍ ຢູ່ທີ່ສຳນັກງານເທດສະບານ ກຳແພງນະຄອນ, ເພິ່ນກ່າວວ່າ:

"ເຊັນສັນຍາຢຸດຍິງ ບໍ່ໝາຍຄວາມວ່າ ສົງຄາມໄດ້ສິ້ນສຸດລົງແລ້ວ. ພວກເຮົາຕ້ອງສະແດງເຈດຕະນາດີ ວ່າ ຢາກຮ່ວມມືກັບກອງທັບຝະລັ່ງ, ແຕ່ສິ່ງນັ້ນ ບໍ່ໝາຍຄວາມວ່າ ຕ້ອງສະແດງອອກເຖິງຄວາມອ່ອນແອ ແລະ ກໍ່ຕ້ອງຜ່ອນສັ້ນຜ່ອນຍາວ ໃນທຸກໆບັນຫາກັບພວກເຂົາ. ກົງກັນຂ້າມ ຍິ່ງກວ່າເວລາໃດໝົດ ພວກເຮົາກໍ່ຕ້ອງ ຕຽມພ້ອມສູ້ຮົບເປັນປະຈຳ ເພື່ອປະເຊີນໜ້າກັບທຸກໆເຫດການທີ່ອາດຈະມີຂຶ້ນໂດຍບັງເອີນ".

ໃນເວລາຕໍ່ມາ ເມື່ອຕີລາຄາແນວທາງຂອງລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໃນໄລຍະປະຫວັດສາດ ທີ່ສັບສົນທີ່ສຸດຂອງປະເທດ ປະທານໂຮ່ຈີມິນ ໄດ້ຊີ້ອອກວ່າ: "ພວກເຮົາຕ້ອງການສັນຕິພາບ ເພື່ອປັບປຸງປະເທດຊາດ ໃຫ້ໝັ້ນຄົງ, ສະນັ້ນພວກເຮົາຈຶ່ງອົດກັ້ນຄວາມຮູ້ສຶກຂອງຕົນເອງ ແລະ ຜ່ອນສັ້ນຜ່ອນຍາວເພື່ອຮັກສາສັນຕິພາບ. ເຖິງແມ່ນວ່າພວກລ່າເມືອງຂຶ້ນຝະລັ່ງ ໄດ້ຫລົບລົ້ນປົ້ນຄວາມ ແລະ ໄດ້ກໍ່ສົງຄາມກໍ່ຕາມ, ແຕ່ເກືອບໜຶ່ງປີແຫ່ງສັນຕິພາບໄດ້ໃຫ້ເວລາແກ່ພວກເຮົາ ເພື່ອກໍ່ສ້າງກຳລັງພື້ນຖານ".

໙

ໃນໄລຍະ ໗ ເດືອນ, ນັບແຕ່ມື້ການປະຕິວັດໄດ້ຮັບໄຊຊະນະແລ້ວ ໄດ້ເຮັດວຽກຫລາຍຢ່າງ ເພື່ອປັບປຸງແສນຍານຸພາບທາງການທະຫານຂອງສາທາລະນະລັດໜຸ່ມນ້ອຍ ແລະວຽກງານດັ່ງກ່າວບໍ່ມີເວລາໃດທີ່ຈະຢຸດນິ່ງໄດ້. ຖ້າວ່າ ກ່ອນການລຸກຮືຂຶ້ນ

ເດືອນສິງຫາ, ການຫັນເອົາສະມາຄົມກູ້ຊາດໄປຕາມແບບທະຫານ ໄດ້ດຳເນີນໄປຢູ່ໃນເຂດປົດປ່ອຍເປັນສ່ວນຫລາຍ, ແຕ່ເວລານີ້ ຂະບວນວິວັດດັ່ງກ່າວດຳເນີນໄປ ຢູ່ທົ່ວປະເທດ. ທ້າຍປີ ໑໙໔໔ ເກືອບວ່າຢູ່ໃນທຸກຄຸ້ມ, ບ້ານ, ເມືອງ, ໂຮງງານ, ບໍ່ແຮ່ ໄດ້ສ້າງຕັ້ງໜ່ວຍທະຫານລາດກອງຫລອນ. ຢູ່ໃນບົດປາໄສຂອງເພິ່ນ, ປະທານ ໂຮ່ຈີມິນເອີ້ນໜ່ວຍດັ່ງກ່າວວ່າແມ່ນ "ກຳແພງເຫລັກກ້າຂອງປະເທດຊາດ".

ສະມາຊິກຂອງສະມາຄົມກູ້ຊາດ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຝຶກແອບວິຊາທະຫານ, ຝຶກຊ້ອມຍຸດທະວິທີປ້ອງກັນຕົວ. ທົ່ວປະເທດດຳເນີນຂະບວນການຊອກຄົ້ນ ແລະ ຜະລິດອາວຸດປະເພດປືນ. ເປັນການກັບຄືນສູ່ອະດີດ ພວກລຸງຊ່າງຕີເຫລັກ ຢູ່ຊົນນະບົດ ຢຸດເຊົາການຫລອມໄຖ, ຄາດ, ຕີກ່ຽວ ໄວ້ເປັນການຊົ່ວຄາວ ແລ້ວກາຍເປັນຊ່າງຫລອມດາບ, ງ້າວ, ພວກເດັກນ້ອຍພາກັນຊອກເສດເຫລັກ ຜູ້ໃຫຍ່ບໍລິຈາກ ໝໍ້ແຫກແຕກໂປະ, ຂະນະດຽວກັນ ກໍມີຜູ້ບໍລິຈາກກະທັ້ງເຄື່ອງສັກກາລະບູຊາອີກດ້ວຍ.

ກອງທັບຫລວງເພີ່ມຂຶ້ນຢ່າງວ່ອງໄວດ້ານຄຸນນະພາບ ແລະ ປະລິມານ. ຫລາຍກົມກອງໃຫຍ່ຄື ກອງຮ້ອຍ ແລະ ກອງພັນ ກໍປະກົດຂຶ້ນ. ຄວນເວົ້າວ່າ ເຖິງແມ່ນວ່າໃນຕົວຈິງພັກຕ້ອງເຄື່ອນໄຫວຢູ່ໃຕ້ດິນກໍຕາມ, ແຕ່ພັກກໍ່ສາມາດບັນຊາຂະບວນວິວັດແຫ່ງການປະກອບສ້າງກຳລັງປະກອບອາວຸດຂອງສາທາລະນະລັດ. ປັດໄຈດັ່ງກ່າວ ໄດ້ມີບົດບາດຕັດສິນ ໃນການຕໍ່ຕ້ານຍາວນານໃນເວລາຕໍ່ມາ. ພາຍໃຕ້ການນຳພາຂອງພັກ , ໂຮງຮຽນການທະຫານສອງແຫ່ງ ຊຶ່ງແມ່ນໂຮງຮຽນກອງທັບຫລວງ ແລະ ໂຮງຮຽນທະຫານລາດກອງຫລອນໄດ້ຖືກເປີດສອນຢູ່ຮ່າໂນ້ຍ. ຫລາຍຄົນໄດ້ຮຽນຈົບໂຮງຮຽນເຫລົ່ານີ້ ແລະ ໄດ້ກາຍເປັນຜູ້ບັນຊາການທະຫານທີ່ມີຊື່ສຽງ.

ຕົກມາຮອດຕົ້ນປີ ໑໙໔໖ ອາດຈະເວົ້າຢ່າງໜັກແໜ້ນເຖິງການ ປະຕິບັດງານຂອງກອງທັບແບບໃໝ່ ເຊິ່ງຖືກກຳເນີດຈາກປະຊາຊົນ, ອີງໃສ່ປະຊາຊົນ ແລະ ສູ້ຮົບເພື່ອຜົນປະໂຫຍດຂອງປະຊາຊົນ, ນັບຕັ້ງແຕ່ເວລານັ້ນ ປະຊາຊົນເອີ້ນກອງທັບ ດ້ວຍຄວາມຮັກແພງວ່າເປັນ "ກອງທັບຂອງລຸງໂຮ່".

ລະດູບານໃໝ່ປີ ໑໙໔໗, ປະທານໂຮ່ຈີມິນໄປເຂົ້າຮ່ວມພິທີ ເປີດສົກຮຽນໃໝ່ຂອງໂຮງຮຽນການທະຫານທີ່ແຂວງເຊີນໄຕ ເຊິ່ງຕັ້ງຢູ່ພາກຕາເວັນຕົກສຽງເໜືອຂອງປະເທດ. ຢູ່ແຫ່ງນີ້ ເປັນຄັ້ງທຳອິດທີ່ເພິ່ນເວົ້າວ່າ ຄຳຂວັນຂອງກອງທັບປົດປ່ອຍຫວຽດນາມ ຕ້ອງເປັນສັບດັ່ງຕໍ່ໄປນີ້ "ຈົງຮັກພັກດີຕໍ່ປະເທດຊາດ, ສັດຊື່ບໍລິສຸດຕໍ່ປະຊາຊົນ".

ແຕ່ນັ້ນມາ ສັບດັ່ງກ່າວໄດ້ກາຍເປັນຄຳເວົ້າມ່ວນຫູ, ກາຍເປັນເລືອດເນື້ອ ຂອງນັກຮົບແຕ່ລະຄົນ, ຂອງປະຊາຊົນແຕ່ລະຄົນທີ່ຈັບອາວຸດຕໍ່ສູ້,ຂອງນັກຮົບທະຫານລາດກອງຫຼອນແຕ່ລະຄົນ ແລະ ໄດ້ຖືກນຳໃຊ້ໃນການຕໍ່ຕ້ານທັງສອງຄັ້ງຂອງປະຊາຊົນຫວຽດນາມ.

ປະທານໂຮ່ຈີ່ມິນ ແລະ ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຕ້ອງພາຍເຮືອປະຕິວັດ ຢູ່ໃນແມ່ນ້ຳອັນເຕັມໄປດ້ວຍແກ້ງຕາດທີ່ອັນຕະລາຍ: ຫລັງຈາກຜ່ານຜ່າຈາກແກ້ງແຫ່ງນີ້ ຢູ່ຕໍ່ໜ້າພັດປະກົດມີແກ້ງອີກບ່ອນໃໝ່ ຊຶ່ງດ້ານຄວາມອັນຕະລາຍບໍ່ຫລຸດລົນກັນ.

ທະຫານຈຽງໄຄເຊັກສອງແສນຄົນກໍຍັງ ບໍ່ສາມາດປ່ຽນລັດຖະບານ ປະຕິວັດຂອງໂຮ່ຈີ່ມິນ ດ້ວຍພວກລູກມືຂອງພວກເຂົາ, ພວກເຂົາຈຶ່ງຈຳເປັນຕ້ອງໂຕນໜີ ອອກຈາກຫວຽດນາມ ຢ່າງອັບອາຍຂາຍໜ້າ. ສາທາລະນະລັດໜຸ່ມນ້ອຍຫລຸດພົ້ນຈາກສັດຕູຕົວໜຶ່ງ ທີ່ອັນຕະລາຍ ແລະ ເລິກແລບທີ່ສຸດ, ນັບທັງພວກປະຕິການຫລາຍຄົນ.

ປະເທດຫວຽດນາມໄດ້ປົດແບກຫາບອັນໜັກໜ່ວງອອກຈາກບ່າ: ທະຫານຈຽງໄຄເຊັກປຽບເໝືອນຝູງຕັກກະແຕນ ທີ່ບິນມາຈາກພາກເໜືອ, ພວກມັນໄດ້ທຳລາຍແລະ ລັກປຸ້ນປະຊາຊົນ. ໃນຊຸມເດືອນດັ່ງກ່າວນັ້ນ ຂະບວນລົດໄຟ ແລະ ລົດຍົນ ຂອງພວກຂີ້ລັກ ໄດ້ແລ່ນຕາມກົ້ນກັນໄປຕາມທາງລົດໄຟ ແລະ ທາງລົດມຸ່ງໜ້າສູ່ຈີນ. ອີງຕາມຂໍ້ມູນຂອງລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ທະຫານຈຽງໄຄເຊັກໄດ້ເອົາຊັບສົມບັດກັບຄືນຈີນຄິດເປັນມູນຄ່າ ໔໕໐ ລ້ານຫລຽນ. ອີກ໔໐໐ ລ້ານຫລຽນນັ້ນພວກເຂົາໄດ້ຮັບຢ່າງຜິດກົດໝາຍຜ່ານທະນາຄານອິນດູຈີນ.

ກອງທັບຈຽງໄຄເຊັກໜີພົ້ນຈາກຫວຽດນາມ, ແຕ່ສັດຕູຕົວໃໝ່ແຮ່ງອັນຕະລາຍໄດ້ເຂົ້າມາແທນທີ່ຢ່າງຟ້າວຟັ່ງ. ພາຍຫລັງເຊັນຂໍ້ຕົກລົງຂັ້ນຕົ້ນມີດຽວ ກອງທະຫານສົ່ງນອກຂອງຝະລັ່ງໄດ້ເລີ່ມຕົ້ນຍົກພົນຂຶ້ນບົກທີ່ໄຮຟອງ. ສິ່ງທີ່ຕິດຕາມມາແມ່ນການທີ່ຝະລັ່ງລະເມີດບາງຂໍ້ຄວາມໃນຂໍ້ຕົກລົງຂັ້ນຕົ້ນຢ່າງຮ້າຍແຮງ ແມ່ນການປະທະກັນທາງທະຫານກັບທະຫານລາດກອງຫລອນຂອງຫວຽດນາມ. ລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມຮູ້ວ່າຜູ້ບັນຊາການສູງສຸດຂອງກອງທັບທະຫານສົ່ງນອກຝະລັ່ງ ຢູ່ອິນດູຈີນ ຄືນາຍພົນ ເລີກະແລ ເປັນຜູ້ອອກຄຳສັ່ງລັບ ໃຫ້ຜູ້ບັນຊາກອງທັບຝະລັ່ງ ບໍ່ເອົາຫົວຊາ

ນຳ ຜູ້ຕາງໜ້າຂອງຫວຽດນາມ, ຕ້ອງຄວບຄຸມເຂດທີ່ຕັ້ງຄ້າຍຢູ່, ຕ້ອງກະກຽມການສັງຫານບັນດາຜູ້ນຳຂອງ "ອົງການຈັດຕັ້ງອານນາມທ້ອງຖິ່ນ" ແລະ ກໍ່ລັດຖະປະຫານ.

ຂະນະດຽວກັນ ພວກລ່າເມືອງຂຶ້ນເລັ່ງໃຫ້ມີການສ້າງຕັ້ງ "ລັດຖະບານ" ຂຶ້ນຢູ່ທີ່ນາມໂບທີ່ຖືກຍຶດຄອງ. ລັດຖະບານດັ່ງກ່າວຈະເປັນພື້ນຖານການເມືອງ ເພື່ອຟື້ນຟູລະບອບເກົ່າ.

ກອງທະຫານສົ່ງນອກຂອງຝະລັ່ງ ໄດ້ບຸກຍຶດທົ່ງພຽງໄຕງວຽນທີ່ຕັ້ງຢູ່ພາກກາງ ແລ້ວປະກາດສ້າງຕັ້ງລັດປົກຄອງຕົນເອງ ຂອງເຜົ່າມົ້ງ. ພວກລ່າເມືອງຂຶ້ນຍຶດເອົາເມືອງດົງດັງ ຊຶ່ງເປັນເມືອງໜຶ່ງຢູ່ຊາຍແດນຫວຽດນາມ–ຈີນ ແລະ ຄວບຄຸມເສັ້ນທາງລົດໄຟສາຍສຳຄັນຂອງພາກເໜືອຫວຽດນາມ. ໃນຕົວຈິງ ລັດຖະບານປະຊາຊົນໄດ້ຕົກຢູ່ໃນວົງປິດລ້ອມຂອງທະຫານສັດຕູ.

ລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຮຽກຮ້ອງໃຫ້ທຳການເຈລະຈາຢ່າງເປັນທາງການລະຫວ່າງຝະລັ່ງກັບຫວຽດນາມຮອບທີສອງຢ່າງໄວວາຕາມທີ່ຄາດຄະເນໄວ້ລ່ວງໜ້າໃນຂໍ້ສັນຍາຂັ້ນຕົ້ນ. ທ້າຍເດືອນມີນາ, ເຈຍເປຣີ ອັກຊັງລີ-ເຢີ ຂ້າຫລວງໃຫຍ່ຂອງຝະລັ່ງຢູ່ອິນດູຈີນ ໄດ້ສະເໜີປະທານໂຮ່ຈີມິນ ໃຫ້ດຳເນີນການເຈລະຈາ ຢູ່ເທິງກຳປັ່ນລາດຕະເວນຂອງຝະລັ່ງທີ່ກຳລັງທອດສະໝໍຢູ່ຮ່າລອງ ທີ່ຫ່າງຈາກຮ່າໂນ້ຍ ໑໕໐ ກິໂລແມັດ ທາງກ້ຳຕາເວັນອອກສຽງໃຕ້. ເມື່ອອັກຊັງລີເຢີນັກລ່າເມືອງຂຶ້ນຜູ້ຊຳນິຊຳນານ ອອກຂໍ້ສະເໜີດັ່ງກ່າວ ດ້ານໜຶ່ງ ເພິ່ນຢາກດູໝິ່ນ ລັດຖະບານໂຮ່ຈີມິນ ແລະ ອີກດ້ານໜຶ່ງ ຢາກຂົ່ມຂູ່ຜູ້ນຳຫວຽດນາມ ດ້ວຍວິທີເຊີດຊູ ກຳລັງແຮງດ້ານການທະຫານຂອງປະເທດຝະລັ່ງ.

ພາຍຫລັງການພິຈາລະນາຄຳເຫັນທັງໝົດທີ່ "ສະໜັບສະໜູນ" ແລະ ທີ່"ຄັດຄ້ານ" ເປັນເວລາດົນນານ ໂດຍຄຳນຶງເຖິງສະພາບການອັນເຄັ່ງຮ້ອນຂອງປະເທດ , ຄະນະປະຈຳຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຈຶ່ງຕົກລົງຮັບເອົາ ຂໍ້ສະເໜີຂອງອັກຊັງລີເຢີ ເພື່ອວ່າໃນການເຈລະຈາຄັ້ງນີ້ ຈະທວງໃຫ້ຝ່າຍຝະລັ່ງເຫັນດີດຳເນີນການເຈລະຈາຂັ້ນຜູ້ນຳລັດຖະບານທີ່ປາຣີ. ປະທານ ໂຮ່ຈີມິນ ແລະ ຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນຄິດໄລ່ວ່າ ຢູ່ປາຣີ ອັກຊັງລີເຢີ, ເລີກະແລແລະແຫລວລ່າເມືອງຂຶ້ນໂຕອື່ນໆ ຈະບໍ່ສາມາດກົດດັນວົງການກຳອຳນາດຝະລັ່ງ ຢູ່ໃນລະດັບເທົ່າກັບປະຈຸບັນນີ້ໄດ້.

ວັນທີ ໒໔ ເດືອນມີນາ ເວລາ ໑໐ ໂມງເຊົ້າ ຍົນເທາະນ້ຳ"ກາຕາລີນາ"ລຳໜຶ່ງໄດ້ຈອດ ຢູ່ເທິງໜ້ານ້ຳອ່າວອັນ ສະຫງົບງຽບ ຢູ່ແປະຂ້າງກຳປັ່ນຮົບ "ເອມີນແບກແຕັງ". ຈອມພົນເຮືອ ອັກຊັງລີເຢີ ແລະ ເລີກະແລ ຢືນຄອຍລໍຮັບປະທານ ປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຢູ່ເທິງລະບຽງເຮືອຮົບ ລາດຕາເວນ. ສຽງປືນສະດຸດີກໍດັງຂຶ້ນ ເຮືອຮົບດຶງສະໝໍຂຶ້ນແລ້ວ ກໍແລ່ນອອກໄປທາງທະເລ. ພາຍຫຼັງກິນເຂົ້າເຊົ້າຢູ່ຫ້ອງນາຍທະຫານ ແລະ ພາຍຫຼັງ ທີ່ທັງສອງຝ່າຍຍົກຈອກອວຍພອນກັນ ອັກຊັງລີເຢີ ກໍເຊີນປະທານໂຮ່ຈີມິນຂຶ້ນໄປທາງຫົວຂອງກຳປັ່ນ ເພື່ອກວດກອງເຮືອຮົບ, ເພິ່ນຖືໝວກເຟືອງໃບກວ້າງ ເພື່ອກັນແດດ, ມືຖືໄມ້ຄອນເທົ້າໄມ້ໄຜ່ ຊຶ່ງເປັນໄມ້ເທົ້າທີ່ຕິດຕົວເພິ່ນໄປທົ່ວທຸກເຂດກອງຫຼອນໃນເມື່ອກ່ອນ. ເຮືອຮົບທອດສະໝໍ ແລະ ຝູງເຮືອຮົບກໍຕັ້ງປືນໃຫຍ່ ຢູ່ທາງທ້າຍເຮືອ ແລ້ວພັດພຽນກັນແລ່ນວົນວຽນ ຕໍ່ໜ້າເພິ່ນ. ທະຫານເຮືອນຸ່ງເຄື່ອງແບບສີຂາວ ພາກັນແລ່ນເຂົ້າແຖວຊື່ ຍາວຢຽດ ແລະ ເປົ່າສຽງຮ້ອງໂຮສະແດງຄວາມເຄົາລົບ ເພື່ອຄຳນັບຮັບຕ້ອນປະທານ ປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ.

ເນື້ອໃນຂອງການເຈລະຈາກັບຜູ້ຕາງໜ້າຝະລັ່ງ ໃນຕົວຈິງ ເປັນພຽງແຕ່ ພິທີທີ່ບໍ່ມີຄວາມໝາຍ. ອັກຊັງລີເຢີ ຫຼົບຫຼີກບັນຫານານກີ່. ປະກົດວ່າຕ່າງຝ່າຍຕ່າງກໍມີຄວາມເຂົ້າໃຈທີ່ກົງກັນຂ້າມກັນສຸດຂີດ ກ່ຽວກັບທາດແທ້ຂອງຂໍ້ຕົກລົງຂັ້ນຕົ້ນ. ຝ່າຍຝະລັ່ງຖືວ່າ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ມີຖານະເປັນ"ລັດອິດສະຫລະ" ໝາຍຄວາມວ່າເປັນພຽງໜຶ່ງໃນຮູບການຂອງລະບອບປົກຄອງຕົນເອງຂອງເມືອງຂຶ້ນ, ສ່ວນສະຫະພັນອິນດູຈີນ ແມ່ນເຂດທີ່ຢູ່ພາຍໃຕ້ອຳນາດຂອງຜູ້ສຳເລັດລາຊະການຢູ່ ຫຼື ເວົ້າອີກຢ່າງໜຶ່ງ ກໍຍັງແມ່ນເມືອງຂຶ້ນຂອງຝະລັ່ງຢູ່ນັ້ນເອງ.

ຄະນະຜູ້ແທນຝະລັ່ງກໍຍັງຮັກສາທັດສະນະຄືແນວນີ້ ທັງຢູ່ໃນການເຈລະຈາກັບຫວຽດນາມທີ່ດາລັດເມືອງພັກຜ່ອນ. ການເຈລະຈາດັ່ງກ່າວເປີດຂຶ້ນໃນເວລາຕໍ່ມາ ຄືໃນວັນທີ ໑໗ ເດືອນ ເມສາ ປີ ໑໙໔໖.

ເມື່ອບິນກັບຄືນຮ່າໂນ້ຍ, ນາມພົນຊາລັງທີ່ຮ່ວມເດີນທາງກັບ ປະທານໂຮ່ຈີມິນໄດ້ຖາມເພິ່ນວ່າ ເພິ່ນຕີລາຄາການພົບພໍ້ກັບຂ້າຫຼວງໃຫຍ່ຂອງຝະລັ່ງຄືແນວໃດ. ເພິ່ນຕອບຢ່າງເຍືອກເຢັນວ່າ:

" ຖ້າຈອມພົນເຮືອຢາກສະແດງກຳລັງຂອງກອງເຮືອ ເພື່ອໃຫ້ຂ້າພະເຈົ້າຢ້ານ

ກົວແລ້ວຍອມຈຳນົນ ທ່ານຜູ້ນັ້ນຈະບໍ່ໄດ້ຮັບຜົນຫຍັງ. ເຮືອຮົບຂອງພວກທ່ານ ບໍ່ມີທາງ ແລ່ນທວນກະແສນ້ຳຂອງພວກຂ້າພະເຈົ້າໄດ້ດອກ.

໔

ການເຊັນຂໍ້ຕົກລົງຂັ້ນຕົ້ນກັບຝະລັ່ງ ເປັນການປະນີປະນອມດ້ວຍຄວາມຈຳເປັນ, ເປັນສິ່ງທີ່ພາໃຫ້ເກີດການຕໍ່ສູ້ຢ່າງດຸເດືອດລະຫວ່າງສາທາລະນະລັດໜຸ່ມນ້ອຍ ກັບອິດທິກຳລັງຈັກກະພັດນິຍົມ, ລະຫວ່າງອຳນາດປະຊາຊົນທີ່ມີພັກກອມມູນິດອິນດູຈີນ ເປັນຜູ້ນຳພາກັບພວກປະຕິການຢູ່ພາຍໃນປະເທດ ເຊິ່ງໄດ້ຮັບການອຸ້ມຊູ ຈາກຕ່າງປະເທດ . ເນື່ອງຈາກກອງທັບຈຽງໄຄເຊັກ ຖອນກຳລັງກັບຄືນປະເທດ ແລະການທີ່ພວກລ່າເມືອງຂຶ້ນຝະລັ່ງ ຊຶ່ງນັບມື້ນັບເພີ່ມຄວາມກົດດັນ, ເຮັດໃຫ້ເກີດມີການປ່ຽນແປງ ອັນເປັນຜົນດີຂຶ້ນຢູ່ໃນຫລັກໝັ້ນຂອງບາງພັກຝ່າຍ ແລະ ບາງກຸ່ມຊາດນິຍົມ ອັນເປັນສິ່ງທີ່ສ້າງຄວາມຫວັງວ່າຈະດູດດຶງເອົາເຂົາເຈົ້າ ເຂົ້າຮ່ວມການຕໍ່ສູ້ລວມຂອງທົ່ວປະເທດ ໄດ້ຢ່າງແທ້ຈິງ.

ເຖິງຢ່າງໃດກໍຕາມ ການພົວພັນລະຫວ່າງລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ກັບຜູ້ຕາງໜ້າຝະລັ່ງ ຢູ່ອິນດູຈີນຊ້ຳພັດນັບມື້ນັບຂີ້ຮ້າຍຂຶ້ນທຸກໄຊ້. ການເກາະຜິດແບບເປັນປໍລະປັກກັນຂອງກຳລັງທະຫານຝະລັ່ງ ຊຶ່ງຍິ່ງຫລາຍຕື່ມຂຶ້ນ. ການເຈລະຈາຢູ່ດາລັດ ຕົກຢູ່ໃນສະພາບຈົນຕາແຈ. ປະທານໂຮ່ຈີມິນ ເນັ້ນເຖິງຄວາມຈຳເປັນ ທີ່ຈະຍ້າຍສະຖານທີ່ເຈລະຈາຢ່າງເປັນທາງການ ໄປທີ່ປາຣີໄວເທົ່າໃດຍິ່ງດີ. ເພິ່ນເຫັນວ່າ ຄວນນຳເອົາຂະບວນວິວັດແຫ່ງການເຈລະຈາ ອອກນອກຂອບເຂດອິນດູຈີນ ບ່ອນທີ່ຕ້ອງເຈລະຈາກັບພວກລ່າເມືອງຂຶ້ນທີ່ດຸດ້ານຄື ອັກຊັງລີເຢີ, ຕ້ອງເຮັດໃຫ້ບັນດາວົງການການເມືອງ ແລະ ທາງສຽງອັນກວ້າງຂວາງຂອງຝະລັ່ງ ຫັນມາສົນໃຈນຳບັນຫາຫວຽດນາມ, ຕ້ອງສ້າງສາຍພົວພັນອັນສະໜິດແໜ້ນກັບຂະບວນການປະຊາທິປະໄຕຝະລັ່ງ ຊຶ່ງມີກຳລັງທີ່ມີອິດທິພົນເຊັ່ນ ພັກກອມມູນິດຝະລັ່ງເປັນຫົວໜ້າ. ເພິ່ນຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າການເຈລະຈາບໍ່ບັນລຸໝາກຜົນກໍຕາມ ແຕ່ມັນກໍຍັງຈະມີຜົນປະໂຫຍດ ເພາະວ່າຄະນະຜູ້ແທນຫວຽດນາມ ຈະສາມາດອະທິບາຍໃຫ້ຄົນຝະລັ່ງ ເຂົ້າໃຈ

ແຈ້ງ ເຖິງຈຸດໝາຍຂອງລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ແລະ ທັງຈະໄດ້ຍາດແຍ່ງເອົາເພື່ອນມິດໃໝ່.

ແນ່ນອນວ່າ ການບໍ່ຍອມເລືອກເອົາປາຣີເປັນບ່ອນເຈລະຈາ ກໍ່ເປັນເລື່ອງທີ່ສົມເຫດສົມຜົນ ບໍ່ໜ້ອຍ ຕາມທີ່ໄດ້ຄາດໄວ້ແລ້ວ ການເຈລະຈາຕ້ອງໃຊ້ເວລາດົນນານ , ອັນນີ້ຈະເຮັດໃຫ້ຜູ້ນຳ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມຫລາຍຄົນ ຕ້ອງຢູ່ຫ່າງໄກຈາກປະເທດຊາດ ເປັນເວລາດົນນານ ທັງໆທີ່ເປັນໄລຍະທີ່ສັບສົນທີ່ສຸດ ສຳລັບປະເທດ. ສະຫາຍຈຳນວນໜຶ່ງ ໃນຄະນະປະຈຳ ຄະນະບໍລິຫານງານ ສູນກາງພັກ ບໍ່ເຫັນດີນຳການເດີນທາງຂອງປະທານໂຮ່ຈີມິນ ເພາະ ຢ້ານວ່າຈະບໍ່ປອດໄພ. ພາຍຫລັງຄົ້ນຄວ້າເຫດຜົນ "ເຫັນດີ" ແລະ "ຄັດຄ້ານ" ທັງໝົດຢ່າງຮອບຄອບ ພວກເຮົາກໍ່ຕົກລົງສະເໜີໃຫ້ຝະລັ່ງສືບຕໍ່ການເຈລະຈາຢູ່ປະເທດຝະລັ່ງ. ວັນທີ ໒໖ ເດືອນ ເມສາ ຄະນະຜູ້ແທນສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຊຶ່ງແມ່ນສະຫາຍ ຟາມວັນດົງ ເປັນຫົວໜ້າ ໄດ້ອອກເດີນທາງໄປປາຣີ. ທ້າຍເດືອນພຶດສະພາ ປະທານໂຮ່ຈີມິນກໍ່ຖືກເຊີນໄປຝະລັ່ງ ໃນນາມເປັນແຂກຂອງລັດຖະບານຝະລັ່ງ,

ຕອນເຊົ້າມືດ ວັນທີ ໓໐ ເດືອນພຶດສະພາ ຊາວຮ່າໂນ້ຍ ແລະ ແຂວງໃກ້ຄຽງເປັນພັນໆຄົນແຫ່ກັນເຂົ້າໄປໃນບໍລິເວນມະຫາວິທະຍາໄລຂອງນະຄອນຫລວງ ເພື່ອເຂົ້າຮ່ວມມິດຕິງສົ່ງປະທານອອກເດີນທາງ. ພວກທີ່ມາຮ່ວມມິດຕິງຍົກປ້າຍຄຳຂວັນເປັນພຶງ. ຄຳຂວັນທີ່ສຳຄັນ ແມ່ນ"ຫວຽດນາມ ແມ່ນປະເທດໜຶ່ງ ປະເທດດຽວ. ນາມໂບແມ່ນພາກສ່ວນໜຶ່ງຂອງປະເທດຫວຽດນາມ !".

ເມື່ອເວົ້າກັບປະຊາຊົນຮ່າໂນ້ຍ ປະທານໂຮ່ຈີມິນເວົ້າວ່າ:

"ຊົ່ວຊີວິດຂ້າພະເຈົ້າ ຈະມີພຽງແຕ່ເປົ້າໝາຍດຽວ ຄືຕໍ່ສູ້ເພື່ອສິດຜົນປະໂຫຍດຂອງປະເທດຊາດ ແລະ ຄວາມຜາສຸກຂອງປະຊາຊົນ. ເພື່ອບັນລຸເຖິງເປົ້າໝາຍ ດັ່ງກ່າວນີ້ ຫລາຍຄັ້ງຫລາຍໜົນ ທີ່ຂ້າພະເຈົ້າຕ້ອງລີ້ຊ່ອນບ່ອນຕົວຢູ່ຕາມພູຜາ, ເຂົ້າຄຸກ , ຜ່ານຜ່າຄວາມທຸກທໍລະມານ ແລະ ໄພອັນຕະລາຍ. ຂ້າພະເຈົ້າອຸທິດຕົນໃຫ້ແກ່ການຕໍ່ສູ້ເພື່ອເປົ້າໝາຍດັ່ງກ່າວ ໃນທຸກວັນນີ້ ເຊັ່ນດຽວກັນ ເຊິ່ງແມ່ນໄລຍະທີ່ພວກເຮົາກຳອຳນາດໄດ້ ຍ້ອນຄວາມເປັນປຶກແຜ່ນຂອງປະຊາຊົນ ແລະ ຂ້າພະເຈົ້າຖືກມອບໝາຍໃຫ້ຮັບຕຳແໜ່ງອັນສູງ. ມື້ນີ້ ໂດຍປະຕິບັດຕາມການຕົກລົງຂອງລັດຖະບານ ແລະ ຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນທັງຊາດ ຂ້າພະເຈົ້າຈຶ່ງຕ້ອງອອກເດີນທາງ

ໄປປະເທດທີ່ຫ່າງໄກຫວຽດນາມ ຕັ້ງເປັນພັນໆກິໂລແມັດ, ຕ້ອງແຍກຈາກພວກສະຫາຍ ແລະ ເດີນທາງໄປປະເທດຝະລັ່ງ. ຂ້າພະເຈົ້າຂໍໃຫ້ສັນຍານຳເພື່ອນຮ່ວມຊາດວ່າ ຂ້າພະເຈົ້າພ້ອມດ້ວຍຄະນະຈະພະຍາຍາມຕອບສະໜອງຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນທັງຊາດ".

ມື້ລູນມາ ປະທານໂຮ່ຈີ່ມິນຕື່ນແຕ່ຟ້າບໍ່ທັນແຈ້ງ, ເພິ່ນຂຽນຈົດໝາຍເຖິງເພື່ອນຮ່ວມຊາດນາມໂບວ່າ:

" ຂ່າວທີ່ວ່າຂ້າພະເຈົ້າ ພ້ອມດ້ວຍຄະນະຜູ້ແທນຈະໄປປະເທດຝະລັ່ງ ເພື່ອທຳການເຈລະຈາຢ່າງເປັນທາງການ ສ້າງຄວາມງຸນງົງຂຶ້ນ ໃນໝູ່ເພື່ອນຮ່ວມຊາດທົ່ວປະເທດ ໂດຍສະເພາະໃນໝູ່ເພື່ອນຮ່ວມຊາດນາມໂບ. ອັນນີ້ຄົງຈະອະທິບາຍໄດ້ ດ້ວຍສາເຫດທີ່ວ່າ ອະນາຄົດຂອງນາມໂບຍັງບໍ່ແນ່ນອນ. ຂ້າພະເຈົ້າຂໍຮຽນມາຍັງ ເພື່ອນຮ່ວມຊາດຈົ່ງຫຼຸ່ນທ່ຽງ... ເພື່ອນຮ່ວມຊາດນາມໂບ ແມ່ນພາກສ່ວນໜຶ່ງຂອງປະຊາຊົນຫວຽດນາມ. ແມ່ນ້ຳອາດຈະບົກແຫ້ງໄດ້ ພູອາດຈະເຈື່ອນໄດ້ ແຕ່ວ່າສັດຈະທຳດັ່ງກ່າວບໍ່ມີໃຜອາດຈະທັບມ້າງໄດ້.

ຂ້າພະເຈົ້າຂໍຮຽກຮ້ອງ ໃຫ້ເພື່ອນຮ່ວມຊາດຈົ່ງຮັດແໜ້ນຄວາມສາມັກຄີ. ນີ້ວມືທັງຫ້ານີ້ວຍ່ອມ ມີທັງນີ້ວຍາວນີ້ວສັ້ນ. ແຕ່ສັ້ນຫຼືຍາວ ລ້ວນແຕ່ຮ່ວມກັນເຂົ້າ ຢູ່ຝາມືດຽວ. ຢູ່ໃນໝູ່ປະຊາຊົນຫວຽດນາມຫຼາຍລ້ານຄົນ ມີຄົນທີ່ແຕກຕ່າງກັນ, ແຕ່ວ່າພວກເຮົາໝົດທຸກຄົນ ລ້ວນແຕ່ຖືກກຳເນີດຈາກປູ່ຍາຕາຍາຍດຽວກັນ. ຖ້າວ່າພວກເຮົາເປັນເອກະພາບກັນ, ປະເທດຂອງພວກເຮົາ ຈຶ່ງຈະມີອະນາຄົດອັນສະຫວ່າງສະໄຫວ".

ປະທານໂຮ່ຈີ່ມິນຢືນຮ່ວມກັບນາຍພົມຊາລັງ; ເມື່ອຍົນລົງຈອດທີ່ສະໜາມ ບິນເລີແກ, ເພິ່ນໄດ້ຮັບຂ່າວຢ່າງກະທັນຫັນທີ່ສຸດຂ່າວໜຶ່ງວ່າ ຢູ່ໄຊ່ງ່ອນໄດ້ປະກາດ ສ້າງຕັ້ງ "ສາທາລະນະລັດຫຸ່ນນາມກີ່"ຂຶ້ນ. ຄົນຝະລັ່ງເຂົ້າໃຈມາດຕາຂອງຂໍ້ຕົກລົງ ຂັ້ນຕົ້ນກ່ຽວກັບການຮັບຮູ້ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມວ່າເປັນປະເທດທີ່ມີອິດສະຫລະພາບ ຄືຈັ່ງຊັ້ນລະ! ດ້ວຍຄວາມໂມໂຫສຸດຂີດ ໂດຍບໍ່ປິດບັງຄວາມຄຽດແຄ້ນຂອງຕົນ ປະທານໂຮ່ຈີ່ມິນເວົ້າຕໍ່ຊາລັງວ່າ:

" ມັນແມ່ນການກະທຳທີ່ບໍ່ສັດຊື່ຂອງຝ່າຍຝະລັ່ງ. ຂ້າພະເຈົ້າຂໍເຕືອນທ່ານວ່າບໍ່ຄວນຫັນປ່ຽນນາມໂບຂອງພວກຂ້າພະເຈົ້າໃຫ້ເປັນຄືເຂດອານຊັດ ແລະ ລໍແຣນ. ຖ້າບໍ່ດັ່ງນັ້ນ, ສົງຄາມເປັນຮ້ອຍປີ ຈະລະເບີດຂຶ້ນລະຫວ່າງພວກເຮົາ " ເພິ່ນມ້ວນທ້າຍ

ຢ່າງໜັກແໜ້ນ.

ຍົນແວ່ຈອດຢູ່ເລີແກສາມມື້. ຢູ່ນະທີ່ນີ້ ເພິ່ນໄດ້ຮັບໂທລະເລກຈາກປາຣີ ທີ່ມີເນື້ອໃນດັ່ງຕໍ່ໄປນີ້: " ຂໍໃຫ້ທ່ານປະທານໂຮ່ຈີມິນພັກຢູ່ທີ່ເບຍຣິດໄລຍະໜຶ່ງ, ລໍຖ້າຈົນກວ່າການປະ ອບລັດຖະບານຝະລັ່ງສຳເລັດສາກ່ອນ ຈຶ່ງຈະເຊີນໄປປາຣີ ".

ປະທານໂຮ່ຈີມິນພັກຢູ່ເບຍຣິດ ໑໐ ວັນ ບ່ອນນີ້ເປັນເມືອງຕາກອາກາດ ເມືອງໜຶ່ງທີ່ສວຍງາມ ຕັ້ງຢູ່ແຄມຝັ່ງທະເລກ້ຳຕາເວັນຕົກຂອງປະເທດຝະລັ່ງ ໃກ້ກັບແອດສະປາຍ, ເພື່ອລໍຖ້າການເຊີນຂອງລັດຖະບານຝະລັ່ງ ທີ່ຫາກໍ່ປະກອບຂຶ້ນໃໝ່. ຍຸດທະວິທີຖ່ວງດຶງເວລາຢ່າງມີເຈຕະນາ ຄົງຈະເກີດຈາກແຜນການຂອງຜູ້ຕາງໜ້າທີ່ກຳອຳນາດຝະລັ່ງຈຳນວນໜຶ່ງ ຊຶ່ງເປັນພວກທີ່ບໍ່ຢາກໄດ້ຍິນເລື່ອງກ່ຽວກັບປະເທດຫວຽດນາມ ທີ່ມີອິດສະຫລະພາບ ແລະ ເອກະລາດ.

ວັນທີ ໖ ເດືອນກໍລະກົດ, ວັງ ຟົງແຕນບະໂລ ທີ່ຕັ້ງຢູ່ນອກປາຣີ ໄດ້ຖືກເອ້ຍ້ອງດ້ວຍທຸງສາມສີຂອງປະເທດຝະລັ່ງ ແລະ ທຸງສີແດງດາວຄຳຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມເປັນບ່ອນໄຂການເຈລະຈາຢ່າງເປັນທາງການ ຮອບທີສອງລະຫວ່າງຫວຽດນາມກັບຝະລັ່ງ. ການດຳເນີນການເຈລະຈາສະແດງໃຫ້ເຫັນທັດສະນະ ທີ່ກົງກັນຂ້າມກັນຢ່າງສິ້ນເຊີງຂອງສອງຝ່າຍ. ໂດຍອີງໃສ່ຂໍ້ຕົກລົງຂັ້ນຕົ້ນ ຄະນະຜູ້ແທນຫວຽດນາມທວງໃຫ້ລັດຖະບານຝະລັ່ງ ຕ້ອງຮັບຮູ້ເອກະລາດແຫ່ງຊາດ ແລະຟື້ນຟູຄວາມເປັນເອກະພາບຂອງຫວຽດນາມ ໃນຂອບເຂດພັນທະພາບຝະລັ່ງ, ທວງໃຫ້ຮັບຮູ້ສິດອະທິປະໄຕຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໃນບັນຫາພາຍໃນ ແລະ ຕ່າງປະເທດ ແລະ ຖືວ່າ "ສະຫະພັນອິນດູຈີນ" ເປັນພຽງຮູບການ ແຫ່ງການປະສານສົມທົບຜົນປະໂຫຍດໃນການຮ່ວມມືດ້ານເສດຖະກິດ, ວັດທະນະທຳຂອງສາມປະເທດ ຄື ຫວຽດນາມ, ລາວ ແລະ ຂະແມ. ສຸດທ້າຍ ຄະນະຜູ້ແທນຫວຽດນາມຮຽກຮ້ອງ ຢ່າງເດັດດ່ຽວ ໃຫ້ຢຸດເຊົາເລ່ກົນຕັດແຍກນາມໂບອອກຈາກສາທາລະນະລັດ ປະຊາທິປະໄຕ ຫວຽດນາມ. ໃນວາລະປະຊຸມຄົບຄະນະ ເຢືອງແບັກມາຍ ສະມາຊິກຄົນໜຶ່ງ ຂອງຄະນະຜູ້ແທນລັດຖະບານ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ໄດ້ຖະແຫລງວ່າ:

"ຕາບໃດທີ່ພວກຝະລັ່ງຍັງຊອກວິທີທາງແຍກນາມໂບ ອອກຈາກຫວຽດນາມພາຍໃຕ້ຮູບການອັນນີ້ ຫລື ອັນນັ້ນຢູ່, ຕາບນັ້ນການຕົກລົງກັນລະຫວ່າງຫວຽດນາມ ກັບ ຝະລັ່ງ ກໍເປັນສິ່ງທີ່ເປັນໄປບໍ່ໄດ້ເລີຍ. ມິດຕະພາບ ຝະລັ່ງ-ຫວຽດນາມ, ສັນຕິພາບ

ຢູ່ຫວຽດນາມ, ສາຍພົວພັນໃນອະນາຄົດ ລະຫວ່າງພວກເຮົາ ທັງໝົດນີ້ລ້ວນແຕ່ຂຶ້ນກັບບັນຫານານໂບ. ຈຳເປັນຈຳຕ້ອງແກ້ໄຂບັນຫາດັ່ງກ່າວ ໄວເທົ່າໃດຍິ່ງດີ".

ເຖິງຢ່າງໃດກໍຕາມ ຝ່າຍຝະລັ່ງກໍຍັງຍຶດໝັ້ນຢູ່ບົນເງື່ອນໄຂຂອງການແກ້ໄຂບັນຫາຕາມແບບທີ່ໃນຕົວຈິງ ໝາຍເຖິງການແບ່ງແຍກຫວຽດນາມ ແລະ ທຳລາຍສິດອະທິປະໄຕ ໃນຂົງເຂດການເງິນ ການທະຫານ ແລະ ການຕ່າງປະເທດ, ເວົ້າອີກຢ່າງໜຶ່ງ ກໍໝາຍຄວາມວ່າ ຫວຽດນາມຕ້ອງເສຍສິດເປັນເອກະລາດ ແລະ ຫັນປ່ຽນເປັນປະເທດເມືອງຂຶ້ນແບບໃໝ່. ເມືອງຂຶ້ນແບບໃໝ່ດັ່ງກ່າວ ຈະເປັນຄືແນວໃດນັ້ນ ມັນກໍເຫັນແຈ້ງຜ່ານ"ສາທາລະນະປົກຄອງຕົນເອງ" ຊຶ່ງພວກລ່າເມືອງຂຶ້ນຝະລັ່ງເປັນຜູ້ສ້າງຕັ້ງຂຶ້ນຢູ່ພາກໃຕ້ຫວຽດນາມ. ກະໂຕອັກຊັງລີເຢີ ເປັນຜູ້ນຳພາລັດຖະບານຫຸ່ນ, ສ່ວນ "ສະພາທີ່ປຶກສາ" ພັດແມ່ນຜູ້ຕາງໜ້າຝະລັ່ງເປັນຜູ້ຊີ້ນຳຢ່າງສິ້ນເຊີງ.

ປະທານໂຮ່ຈີມິນບໍ່ເຂົ້າຮ່ວມຢ່າງເປັນທາງການ ໃນຄະນະຜູ້ແທນຫວຽດນາມສະນັ້ນຈຶ່ງບໍ່ມີໜ້າໃນການເຈລະຈາທີ່ຟົງແຕນບະໂລ. ເພິ່ນພຳນັກຢູ່ປາຣີ ແລະ ເຮັດວຽກຕິດຕໍ່ກັນຕະຫລອດ ໑໔ ຊົ່ວໂມງຕໍ່ມື້. ເພິ່ນພັກຢູ່ທີ່ໂຮງແຮມແຫ່ງໜຶ່ງ ຕັ້ງຢູ່ໃກ້ສວນສາທາລະນະມົງໂຊ. ຜູ້ທີ່ມາຢ້ຽມຢາມເພິ່ນ ຢູ່ໃນໂຮງແຮມແມ່ນຜູ້ແທນຂອງອົງການຈັດຕັ້ງມະຫາຊົນໃຫຍ່ທັງໝົດຂອງຝະລັ່ງ, ຜູ້ນຳຂອງສາມພັກສຳຄັນ ພວກທີ່ປະກອບເປັນ ສະມາຊິກຂອງສະພາແຫ່ງຊາດຝະລັ່ງ, ເພື່ອນມິດ ແລະ ຜູ້ທີ່ຮູ້ຈັກກັບເພິ່ນມາແຕ່ກ່ອນຄື : ມາກແຊນ ກາແຊງ, ມໍຣິດໂຕເຣ,ຊັກ ດຸກໂລ, ຝະຣັງຊົວ ບີວ; ນັກປະພັນ ຜູ້ທີ່ມີຊື່ສຽງເຊັ່ນ: ລຸຍ ອາຣາກົງ, ອີເລຍ ເອຣັງບົວ, ອານນາ ເຊກົກ, ແອນຊາ ຕະຣີໂອເລ ຣີຊາ ບະລົກ, ປີແອ ນານຸຍແອນ.

ໂດຍຊອກຫາວິທີ ເຮັດໃຫ້ອົງການກຳອຳນາດຝະລັ່ງຮັບຮູ້ເອກະລາດຂອງຫວຽດນາມ ຊຶ່ງເປັນສິ່ງຈຳເປັນທີ່ສຸດສຳລັບຫວຽດນາມ, ປະທານໂຮ່ຈີມິນກໍກາງຕໍ່ກຳລັງຂອງຊົນຊັ້ນກຳມະກອນຝະລັ່ງ ແລະ ພັກກອມມູນິດຝະລັ່ງ. ເວລານັ້ນ ມີຜູ້ແທນ ໕ ຄົນຂອງພັກກອມມູນິດຝະລັ່ງ ຢູ່ໃນຄະນະລັດຖະບານ. ເລຂາທິການໃຫຍ່ຂອງພັກແມ່ນ ສະຫາຍມໍຣິດ ໂຕເຣ ກຳຕຳແໜ່ງເປັນຮອງນາຍົກລັດຖະມົນຕີ. ກ່ອນສະໄໝປະຊຸມ ຂອງຄະນະລັດຖະບານ ຊຶ່ງໃນນັ້ນກຳນົດໄວ້ວ່າຈະພິຈາລະນາບັນຫາຫວຽດນາມຢ່າງຮອບດ້ານ, ປະທານໂຮ່ຈີມິນໄດ້ສົ່ງຈົດໝາຍໄປຫາ ມໍຣິດ ໂຕເຣ, ໂດຍມີເນື້ອໃນວ່າ "ສະຫາຍທີ່ຮັກແພງ ! ມື້ອື່ນເຊົ້າ, ວັນພຸດ ຄະນະລັດຖະບານຈະຄົ້ນຄວ້າບັນຫາອິນດູຈີນ. ໂຊກ

ຊາຕາຂອງຫວຽດນາມຂຶ້ນກັບການພິຈາລະນາດັ່ງກ່າວຫລາຍທີ່ສຸດ. ສະນັ້ນ ຂ້າພະເຈົ້າຈຶ່ງຂໍໃຫ້ສະຫາຍເຊີນລັດຖະມົນຕີທັງຫມົດ ທີ່ເປັນສະມາຊິກພັກກອມມູນິດມາເຂົ້າຮ່ວມປະຊຸມ.

ມື້ວານນີ້ ໃນຕອນພົບພໍ້ກັບລັດຖະມົນຕີກະຊວງອານານິຄົມ ຂ້າພະເຈົ້າ ໄດ້ເວົ້າກັບເພິ່ນວ່າ ຈຳເປັນຕ້ອງແກ້ໄຂສອງບັນຫາທີ່ເປັນຂໍກະແຈ ໄປໃນທາງທີ່ດີ, ນັ້ນຄື ເອກະລາດຂອງຫວຽດນາມ ແລະ ອະນາຄົດຂອງນາມກີ່. ລັດຖະມົນຕີຜູ້ນັ້ນ ແນະນຳວ່າພວກຂ້າພະເຈົ້າຍົກຂໍ້ສະເຫນີຕົວຈິງຂຶ້ນ, ຂໍ້ສະເຫນີເຫລົ່ານັ້ນຈະຊ່ວຍໃຫ້ຄະນະລັດຖະບານຮັບຮອງເອົາຄຳສັບ "ເອກະລາດ"ຢ່າງງ່າຍດາຍ. ຂ້າພະເຈົ້າສົ່ງຈົດຫມາຍແລະຂໍ້ຄວາມຂອງຂໍ້ສະເຫນີ ຊຶ່ງມື້ວານນີ້ ຂ້າພະເຈົ້າໄດ້ມອບໃຫ້ລັດຖະມົນຕີກະຊວງອານານິຄົມແລ້ວນັ້ນມາໃຫ້ສະຫາຍ..."

ຊາວກອມມູນິດຝະລັ່ງໄດ້ເຮັດສຸດຄວາມສາມາດ ເພື່ອບີບບັງຄັບຄະນະລັດຖະມົນຕີ ໃຫ້ເອົາໃຈໃສ່ຕໍ່ຄຳເຫັນ ຂອງຄະນະຜູ້ແທນ ສາທາລະນະລັດ ປະຊາທິປະໄຕຫວຽດນາມ. ເປັນຫນ້າເສຍດາຍທີ່ວ່າ ພັກກອມມູນິດຝະລັ່ງບໍ່ມີທ່າແຮງເຫນືອຫມູ່ໃນຄະນະລັດຖະບານ. ລະດູໃບໄມ້ຫລົ່ນປີ ໑໙໔໖ ຜູ້ທີ່ເຫັນດີນຳແນວທາງແຂງກະດ້າງ ທີ່ປະຕິບັດຕໍ່ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ມີທ່າເຫນືອຫມູ່ຢູ່ໃນຄະນະລັດຖະບານຝະລັ່ງ. ຢູ່ກະໂຕເວລານັ້ນເອງ ຢູ່ທີ່ເວທີການເມືອງຝະລັ່ງກໍ່ເກີດມີທ່າອຽງໄປທາງຂວາ. ໃນການເລືອກຕັ້ງ ຄັ້ງວັນທີ ໒ ເດືອນມິຖຸນາ ພັກກອມມູນິດ ແລະ ພັກສັງຄົມນິຍົມຝະລັ່ງໄດ້ສູນເສຍທີ່ນັ່ງຈຳນວນຫລາຍ ໃນສະພານິຕິບັນຍັດ ແລະ ໃນຄະນະກຳມາທິການຮ່າງລັດຖະທຳມະນູນ, ສ່ວນຫົວຫນ້າລັດຖະບານນັ້ນ ບໍ່ແມ່ນນັກສັງຄົມນິຍົມ ຄືໃນເມື່ອກ່ອນ ແຕ່ຊ້ຳພັດເປັນຫົວຫນ້າຂອງຂະບວນການສົ່ງເສີມສາສະຫນາ ທີ່ໃສ່ຊື່ວ່າຂະບວນການສາທາລະນະລັດປະຊາຊົນ...

ຄະນະຜູ້ແທນຫວຽດນາມຍັງເຫລືອທາງອອກດຽວເທົ່ານັ້ນ ຄືສະເຫນີໃຫ້ຝ່າຍຝະລັ່ງເລື່ອນເວລາຕົກລົງ ກ່ຽວກັບບັນຫາຕົ້ນຕໍ ແລະ ຂໍໃຫ້ເຊັນເອກະສານທີ່ ຕ່າງຝ່າຍຕ່າງມີຜົນປະໂຫຍດນຳກັນໃນຊ່ວງໄລຍະນັ້ນ. ວັນທີ ໑໔ ເດືອນກັນຍາ ປະທານ ໂຮ່ຈີມິນ ແລະ ມາຣິອຸດມຸຍເຕ ລັດຖະມົນຕີກະຊວງດິນແດນພົ້ນທະເລຝະລັ່ງ ໄດ້ເຊັນສັນຍາຊົ່ວຄາວລະຫວ່າງ ຫວຽດນາມກັບຝະລັ່ງ.

ສັນຍາຊົ່ວຄາວ ລະບຸໄວ້ວ່າ ການສືບຕໍ່ເຈລະຈາ "ຢ່າງຊ້າບໍ່ໃຫ້ກາຍເດືອນມັງ

ກອນ ປີ ໑໙໕໗". ລັດຖະບານທັງສອງ ລ້ວນແຕ່ໃຫ້ສັນຍາຕໍ່ກັນວ່າ ຈະປົດປ່ອຍຊະເລີຍເສິກ ແລະ ນັກໂທດການເມືອງ "ຍຸດຕິການກະທຳທີ່ເປັນປໍລະປັກກັນຢູ່ນາມກີ້ແລະພາກໃຕ້ຈູງກີ". ກ່ຽວກັບປະຊາມະຕິ ຢູ່ທີ່ນາມກີ ເພື່ອຕັດສິນອະນາຄົດຂອງ ພາກໃຕ້ຫວຽດນາມ ສັນຍາຊື່ວຄາວໄດ້ເວົ້າຢ່າງລວມໆບໍ່ຈັດເຈນ. ຝ່າຍຝະລັ່ງຢ້ານ ພຶດຕິກຳການເມືອງດັ່ງກ່າວຫລາຍທີ່ສຸດ ເພາະວ່າ ພາຍຫລັງທີ່ການສູ້ຮົບຍຸດຕິລົງ ຈຶ່ງເຫັນແຈ້ງວ່າ ມີ/໔ ຂອງດິນແດນນາມກີ ຍັງຕົກຢູ່ພາຍໃຕ້ການຄວບຄຸມ ຂອງກຳລັງຮັກຊາດໝູ່ບ້ານ, ເມືອງ ໑໐໐໐ ກວ່າແຫ່ງ (ໃນຈຳນວນ ໑.໘໕໐) ກໍຍັງຮັກສາ ອົງການແຫ່ງອຳນາດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມໄວ້ຢູ່.

ເມື່ອກັບຄືນເຖິງປະເທດຊາດແລ້ວ, ຢູ່ໃນຄຳຮຽກຮ້ອງທີ່ສົ່ງເຖິງ ເພື່ອນຮ່ວມຊາດນັ້ນ ປະທານໂຮ່ຈີມິນ ໄດ້ຕີລາຄາໝາກຜົນຂອງການເຈລະຈາ ທີ່ຟົງແຕນບະໂລຊຶ່ງດຳເນີນໄປໃນໄລຍະເກືອບສາມເດືອນດັ່ງຕໍ່ໄປນີ້: ຫວຽດນາມໄດ້ບັນລຸເຖິງການພັກລົບຄັ້ງໃໝ່ນັ້ນກໍຄືໝາກຜົນສຳຄັນທີ່ສຸດ; ເປັນຄັ້ງທຳອິດທີ່ຫູງຊາດຂອງ ປະເທດຫວຽດນາມໃໝ່ ປິວສະບັດຢູ່ເທິງດິນແດນຝະລັ່ງ; ລັດຖະບານ ແລະ ປະຊາຊົນຝະລັ່ງ, ເຊັ່ນດຽວກັນກັບທາງສຽງໂລກ ໄດ້ຫັນຄວາມສົນໃຈມາຫາເຫດການຢູ່ຫວຽດນາມ; ຂະນະດຽວກັນ ບັນຫາຕົ້ນຕໍ ເຊັ່ນ ເອກະລາດ ແລະ ເອກະພາບຂອງປະເທດຊາດ ກໍຍັງບໍ່ທັນໄດ້ຖືກແກ້ໄຂ, ຕ້ອງຕໍ່ສູ້ເປັນເວລາຍາວນານ ແລະ ລຳບາກກາກກຳ ຈຶ່ງຈະແກ້ໄຂໄດ້.

ໃນເວລາໄຈ້ແຍກບັນຫາ ທີ່ເປັນສາຍເຫດຕົ້ນຕໍ ຊຶ່ງເຮັດໃຫ້ການເຈລະຈາ ຟົງແຕນບະໂລ ປະລາໄຊ ໃນປຶ້ມ "ບັນທຶກຄວາມຊົງຈຳ"ຂອງຕົນ ຊັກ ດຸກໂລ ໄດ້ຂຽນໄວ້ວ່າ: "ໃນໝູ່ຊາວຝະລັ່ງທີ່ເຂົ້າຮ່ວມເຈລະຈາ ມີຄວາມເຫັນວ່າ ລັດຖະບານຂອງປະທານໂຮ່ຈີມິນ ບໍ່ໝັ້ນຄົງ ແລະ ຊ້ຳພັດຝາກຄວາມຫວັງໄວ້ນຳການເຄື່ອນໄຫວ ຂອງພວກທີ່ເປັນປໍລະປັກກັບປະທານ, ສະນັ້ນ ຈຶ່ງບໍ່ມີເຈຕະນາຢາກແກ້ໄຂບັນຫາທີ່ຖືກຍົກອອນໃຫ້ຖືກຕ້ອງ. ບັນດາຜູ້ກຳອຳນາດຂອງພວກເຮົາ ບໍ່ພໍໃຈນຳສິ່ງທີ່ວ່າ ລັດຖະບານ ຮ່າໂນ້ຍ ແມ່ນໂຮ່ຈີມິນ ນັກກອມມູນິດຜູ້ມີອິດທິພົນເປັນຜູ້ນຳພາ... ກອງປະຊຸມ ຟົງແຕນບະໂລ ໄດ້ປະສົບກັບຄວາມລົ້ມເຫລວ ຍ້ອນວ່າ ບັນດາຜູ້ກຳອຳນາດຝະລັ່ງ ໃນສະໄໝນັ້ນ ຍຶດໝັ້ນຢູ່ບົນທັດສະນະລ່າເມືອງຂຶ້ນ. ຂ້າພະເຈົ້າຈົດຈຳຄວາມເຈັບແຄ້ນແໜ້ນໃຈ-ຂອງປະທານໂຮ່ຈີມິນໄດ້ ເນື່ອງຈາກວ່າຂ້າພະເຈົ້າໄດ້ເຫັນກັບຕາຫລາຍເທື່ອແລ້ວ".

໕

ການທີ່ການເຈລະຈາລະຫວ່າງຝະລັ່ງກັບຫວຽດນາມຮອງທີ່ສອງ ບໍ່ມີຜົນສຳເລັດ ການທີ່ພວກລ່າເມືອງຂຶ້ນຝະລັ່ງ ແລະ ລູກແຫລ້ງຕີນມືຂອງພວກເຂົາດຳເນີນນະໂຍບາຍແບ່ງແຍກຢ່າງດຸເດືອດຢູ່ພາກໃຕ້ຫວຽດນາມ ທັງໝົດນັ້ນໄດ້ຕັ້ງບັນຫາຢ່າງຮີບດ່ວນຂຶ້ນ ຕໍ່ປະຊາຊົນຫວຽດນາມ ຄືອະນາຄົດຂອງນາມໂບຈະເປັນຄືແນວໃດ? ໜັງສືພິມຂອງພວກປະຕິການກ່າວຫາຢ່າງບໍ່ຮູ້ອິດເມື່ອຍວ່າ ລັດຖະບານສາທາລະນະລັດ ປະຊາທິປະໄຕຫວຽດນາມວ່າ ເປັນຝ່າຍທໍລະຍົດ. ໃນຊຸມມື້ທຳອິດທີ່ກັບຄືນມາຮອດປະເທດຊາດ ໃນຄຳຮຽກຮອງເຖິງປະຊາຊົນຫວຽດນາມ ປະທານໂຮ່ຈີມິນ ກໍ່ຍັງຢັ້ງຢືນຫລັກໝັ້ນອັນໜັກແໜ້ນຂອງລັດຖະບານ ກ່ຽວກັບອະນາຄົດຂອງນາມໂບ. ເພິ່ນຂຽນວ່າ: "ນາມໂບ ບັກໂບ ແລະ ຈຸງໂບ ແມ່ນດິນແດນຫວຽດນາມ. ພວກເຮົາຖືກກຳເນີດຈາກ ປູ່ຍ່າຕາຍາຍດຽວກັນ, ລ້ວນແຕ່ແມ່ນອ້າຍນ້ອງຄືງກັນ. ບໍ່ມີໃຜຈະມີສິດແຍກຄອບຄົວອອກຈາກກັນ. ທັງບໍ່ມີໃຜຈະມີສິດແບ່ງແຍກປະເທດຫວຽດນາມເຮົາເໝືອນກັນ. ຕາບໃດທີ່ ປະເທດຊາດຍັງບໍ່ເປັນເອກະພາບ, ຕາບໃດທີ່ເພື່ອນຮ່ວມຊາດຍັງໄດ້ຮັບຄວາມທໍລະມານ ຕາບນັ້ນຂ້າພະເຈົ້າກິນບໍ່ແຊບ ນອນບໍ່ຫລັບ. ຂ້າພະເຈົ້າໃຫ້ຄຳປະຕິຍານ ຢ່າງໜັກແໜ້ນວ່າ: ດ້ວຍຄວາມເດັດດ່ຽວຂອງເພື່ອນຮ່ວມຊາດ, ດ້ວຍຄວາມເດັດດ່ຽວຂອງປະຊາຊົນທັງໝົດນັ້ນ ນາມໂບຈະກັບມາສູ່ອ້ອມອົກຂອງປະເທດຊາດຢ່າງແນ່ນອນ".

ໃນການປະຊຸມຂອງຄະນະປະຈຳສູນກາງພັກ ຄັ້ງທຳອິດ ຫລັງຈາກກັບຄືນປະເທດ, ປະທານໂຮ່ຈີມິນສະເໜີຮຽກໂຮມກອງປະຊຸມຄົບຄະນະ ສະໄໝສາມັນຂອງສະພາແຫ່ງຊາດ ເພື່ອຮັບຮອງເອົາຮ່າງລັດຖະທຳມະນູນ ທີ່ໄດ້ກະກຽມສຳເລັດແລ້ວ ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ແລະ ເພື່ອພິຈາລະນາຫລາຍບັນຫາ ທີ່ຍັງຄ້າງຄາໃນເຄິ່ງປີທີ່ເຕັມໄປດ້ວຍພາຍຸລົມແຮງ. ກອງປະຊຸມຄົບຄະນະ ໄດ້ເປີດຂຶ້ນໃນວັນທີ ໒໘ ເດືອນພະຈິກ ທີ່ໂຮງລະຄອນແຫ່ງຊາດ. ມີຜູ້ແທນສະພາແຫ່ງຊາດຫລາຍຄົນ ບໍ່ມີໜ້າເຂົ້າຮ່ວມ: ໃນຈຳນວນ ໗໐ ບ່ອນນັ່ງສຳລັບຜູ້ຕາງໜ້າພັກຝ່າຍ ທີ່ນິຍົມຈີນ, ເກືອບເຄິ່ງໜຶ່ງຖືກປະຫວ່າງໄວ້ ຄົນຈຳພວກນີ້ໄດ້ໂຕນປະຫວຽດນາມ ແລ່ນ

ຕາມກົ້ນທະຫານຈຽງໄຄເຊັກໄປຈີນ, ໃນຈຳນວນນັ້ນມີຮອງປະທານຫວອຽນຮາຍເຫີນ, ລັດຖະມົນຕີການຕ່າງປະເທດ ຫວອຽນເຕືອງຕາມ, ຮອງປະທານຄະນະກຳມະການທະຫານ ວູຮົ່ງແຄັງ.

ຜູ້ແທນສະພາຄົນໜຶ່ງ ຕັ້ງກະທູ້ຖາມລັດຖະບານຢ່າງເປັນທາງການວ່າຈະມີທ່າທີຄືແນວໃດຕໍ່ທ່ານຮອງປະທານ ແລະ ລັດຖະມົນຕີ ທີ່ໄດ້ໜີອອກຈາກປະເທດຊາດ.

ປະທານໂຮ່ຈີມິນຕອບດ້ວຍນ້ຳສຽງເຈັບປວດວ່າ:

"ພວກທ່ານເຫລົ່ານັ້ນ ບໍ່ມີໜ້າຢູ່ທີ່ນີ້ ເວລາທີ່ປະເທດຊາດກຳລັງປະເຊີນ ກັບຄວາມຫຍຸ້ງຍາກ. ປະຊາຊົນມອບໝາຍຕຳແໜ່ງຂັ້ນສູງສຸດໃຫ້ແກ່ຄົນພວກນັ້ນ, ແຕ່ພວກທ່ານເຫລົ່ານັ້ນຊ້ຳພັດໜີປະຕຳແໜ່ງຕາມລຳພັງໃຈ ແລະ ໂຕນໜີຈາກ ປະເທດຊາດ. ສະນັ້ນຂໍອະນຸຍາດຖາມວ່າ ພວກທ່ານເຫລົ່ານັ້ນ ແມ່ນຄົນທີ່ມີມະໂນທຳບໍ່, ຄົນທີ່ລືມໜ້າທີ່ຂອງຕົນເອງ ບໍ່ຢາກ ຫລືບໍ່ສາມາດແບກຫາບວຽກງານຂອງລັດ. ພວກເຮົາບໍ່ຄືພວກເຂົາ ພວກເຮົາຈະແບກຫາບພາລະ ແລະ ປະຕິບັດໜ້າທີ່ຂອງຕົນໃຫ້ສຳເລັດ ຄືເກົ່າ ".

ສຽງຕົບມືດັງສະນັ່ນຟົ່ນເຟືອນ. ປະທານໂຮ່ຈີມິນຍົກມືຂຶ້ນ ຈາກນັ້ນກໍເວົ້າຕໍ່ວ່າ:

" ແຕ່ຖ້າວ່າພວກເຂົາເຫລົ່ານັ້ນຍັງຄົງເປັນອ້າຍນ້ອງຂອງພວກເຮົາ, ຖ້າວ່າພວກເຂົາຫາກກ້າຫານປະຕິບັດຕາມສຽງຮຽກຮ້ອງຂອງມະໂນທຳ, ຂອງເພື່ອນຮ່ວມຊາດ ແລະຂອງປະເທດຊາດແລ້ວ ກັບຄືນມາ, ພວກເຮົາຍິນດີຕ້ອນຮັບພວກເຂົາເຈົ້າ".

ນັບຕັ້ງແຕ່ສະໄໝປະຊຸມທຳອິດຂອງສະພາແຫ່ງຊາດພຸ້ນ, ຜູ້ແທນສັນນິບາດປະຕິວັດຂອງຫວຽດນາມ ແລະ ພັກຄະນະຊາດຫວຽດນາມໄດ້ທວງໃຫ້ປ່ຽນທຸງຊາດ ເພາະວ່າທຸງດັ່ງກ່າວ "ຄ້າຍຄືກັນ" ກັບທຸງຂອງສາກົນກອມມູນິດ, ດັ່ງນັ້ນຈຶ່ງບໍ່ແທດເໝາະກັບນ້ຳໃຈຊາດຂອງປະຊາຊົນຫວຽດນາມ". ຂໍ້ເລັ່ງທວງດັ່ງກ່າວຂອງພວກເຂົາຖືກນຳມາເວົ້າຄືນອີກຢູ່ໃນສະໄໝປະຊຸມຄັ້ງທີສອງ. ປະທານໂຮ່ຈີມິນໃຫ້ຄຳອະທິບາຍ ກ່ຽວກັບບັນຫາດັ່ງຕໍ່ໄປນີ້: "ແມ່ນແລ້ວ, ສະມາຊິກບາງຄົນຂອງຄະນະລັດຖະບານເຄີຍສະເໜີໃຫ້ປ່ຽນສີທຸງຊາດ, ສະນັ້ນ ລັດຖະບານຈຶ່ງຢາກຈະຍົກບັນຫານີ້ມາພິຈາລະນາ ຢູ່ທີ່ຄະນະປະຈຳສະພາແຫ່ງຊາດ. ແຕ່ວ່າສະພາວະການນັບແຕ່ວັນດັ່ງກ່າວມາເຖິງ ປະຈຸບັນປ່ຽນແປງຢ່າງຫລວງຫລາຍ. ທຸງສີແດງດາວຄຳ ຂອງພວກເຮົາໄດ້ຍ້ອມເລືອດນັກຮົບຫວຽດນາມບໍ່ຈັກເທົ່າໃດຄົນຢູ່ນາມໂບແລະພາກໃຕ້ຈຸງໂບ. ຈາກອາຊີ ໄປຮອດເອີລົບ,

ແຕ່ເອີລີບກັບມາອາຊີ ຢູ່ທົ່ວທຸກແຫ່ງຫົນລ້ວນແຕ່ໄດ້ຄຳນັບຮັບຕ້ອນທ່ານພົນນີ້ ດ້ວຍຄວາມເຄົາລົບ".

ໂຮ່ຈີມິນເວົ້າຕໍ່ ດ້ວຍນ້ຳສຽງໜັກແໜ້ນ,ດວງຕາມີແວວໂນໂຫວ່າ:

" ມາຮອດປະຈຸບັນນີ້ ນອກຈາກເພື່ອນຮ່ວມຊາດຊາວຫາລ້ານຄົນແລ້ວ ຈະບໍ່ມີຜູ້ໃດອີກທີ່ມີສິດທວງໃຫ້ປ່ຽນທຸງຊາດໄດ້.

ແຕ່ວ່າໄລຍະພັກລົບທີ່ຍາດເອົາໄດ້ ຢູ່ຝັ່ງແຕນບະໂລ ດ້ວຍຄວາມລຳບາກຫລາຍທີ່ສຸດນັ້ນ ຊ້ຳພັດຈະສິ້ນສຸດລົງແລ້ວ. ຕົກມາຮອດລະດູໃບໄມ້ຫລົ່ນປີ ໑໙໔໖, ພວກທີ່ຢາກຈະແກ້ໄຂບັນຫາຫວຽດນາມດ້ວຍວິທີການທະຫານ ກໍມີທ່າເໜືອໝູ່ ຢູ່ໃນລັດຖະບານຝະລັ່ງ. ຂະນະທີ່ກຳລັງດຳເນີນການເຈລະຈາທີ່ຝັ່ງແຕນບະໂລ ຝ່າຍຫວຽດນາມ ໄດ້ຮູ້ວ່າກອງທັບສົ່ງນອກຝະລັ່ງ ໄດ້ຮັບຄຳສັ່ງໃຫ້ກຽມບຽດຍຶດທົ່ວພາກເໜືອຫວຽດນາມ. ວັນທີ ໒໓ ເດືອນພະຈິກ ຜູ້ບັນຊາການກຳລັງທະຫານຝະລັ່ງ ຢູ່ຫວຽດນາມພາກເໜືອ ຍື່ນຄຳຂາດໃຫ້ອຳນາດການປົກຄອງຂອງຫວຽດນາມຢູ່ທີ່ໄຮຟອງ ຖອນຕົວອອກຈາກເຂດທ່າເຮືອ ແລະ ເຂດໃກ້ຄຽງຂອງທ່າເຮືອພາຍໃນສອງຊົ່ວໂມງ. ເມື່ອໝົດກຳນົດດັ່ງກ່າວແລ້ວ ໄຮຟອງກໍຖືກທຳລາຍຢ່າງປ່າເຖື່ອນ ດ້ວຍປືນໃຫຍ່ຈາກເຮືອຮົບ ອັນໄດ້ເຮັດໃຫ້ມີຜູ້ເສຍຊີວິດເປັນພັນໆຄົນ.

ຫລັງຈາກວາລະປະຊຸມສາມັນຂອງສະພາລັດຖະມົນຕີ ປະທານໂຮ່ຈີມິນ ຂໍໃຫ້ຫວໍຫງວຽນຢາບ ຢູ່ນຳເພິ່ນກ່ອນ ເພື່ອໂອ້ລົມກັນສອງຕໍ່ສອງ. ເພິ່ນຖາມວ່າ:

"ຖ້າສັດຕູກໍ່ສົງຄາມຢູ່ທີ່ພາກເໜືອ ຝ່າຍຂອງພວກເຮົາ ອາດຈະຮັກສາຮ່າໂນ້ຍໄວ້ໄດ້ດົນປານໃດ ?"

" ຄິດວ່າບໍ່ກາຍໜຶ່ງເດືອນ".

"ສ່ວນຕົວເມືອງອື່ນດ ຈະເປັນແນວໃດ ?"

"ສ່ວນຕົວເມືອງອື່ນນັ້ນ ອາດຈະດົນກວ່ານັ້ນ".

"ສ່ວນເຂດຊົນນະບົດເດ?"

"ເຂດຊົນນະບົດ ແນ່ນອນວ່າພວກເຮົາຮັກສາໄວ້ໄດ້".

ປະທານໂຮ່ຈີມິນຫລຽວຕາທັງຄົ້ນຄິດຢູ່ຄາວໜຶ່ງ ຈາກນັ້ນ ເພິ່ນເງີຍຫົວຂຶ້ນ ມືອາ

ການອ່າວໂສກເສົ້າແດ່, ແຕ່ເດັດດ່ຽວ ບັດແລ້ວຈຶ່ງເອົ້າຂຶ້ນວ່າ:

"ເມື່ອເປັນດັ່ງນັ້ນ ພວກເຮົາກໍ່ຕ້ອງຈະກັບຄືນເຕີນຈາວອີກແລ້ວ".

ໂດຍປະຕິບັດຕາມຄຳສັ່ງຂອງປະທານໂຮ່ຈີ້ມິນ ທວງຽນເລືອງບັງອອກເດີນທາງໄປທວຽດບັກ ເພື່ອກະກຽມສະຖານທີ່ສຳລັບເປັນບ່ອນທີ່ຕັ້ງຂອງອົງການນຳພາ ຂອງພັກ ແລະ ລັດຖະບານ ຖ້າວ່າເກີດມີຄວາມຈຳເປັນ. ການກໍ່ສ້າງຖານທີ່ໝັ້ນສຳລັບ ກອງຫລອນຢູ່ເຂດຈີນມະບົດ ໂດຍສະເພາະຢູ່ເຂດພູຜາປ່າດົງໄດ້ດຳເນີນໄປຢ່າງຮີບຮ້ອນ . ໂຮງງານ, ສາງສຳລັບມ້ຽນຍຸດທະສຳພາລະ ແລະ ສະບຽງອາຫານ ໄດ້ຖືກຍົກຍ້າຍເທື່ອລະນ້ອຍຈາກຕົວເມືອງໄປຍັງເຂດຮາກຖານດັ່ງກ່າວ.

ໃນວັນທີ ໑໙ ເດືອນທັນວາ ກອງທັບຝະລັ່ງບຸກໂຈມຕີຢ່າງກະທັນຫັນ ເຂົ້າໃສ່ຈຸດສຳຄັນທີ່ຮ່າໂນ້ຍ ເຊັ່ນ ໂຮງງານໄຟຟ້າ, ໂຮງຈັກ, ສຳນັກງານລັດຖະບານ. ມື້ລູນມາ ພວກເຂົາຍຶດສຳນັກປະທານປະເທດ, ທຸງແດງດາວຄຳ ຂອງສາທາລະນະລັດປະຊາທິປະໄຕ ຫວຽດນາມ ຖືກປົດລົງ ແລະ ຊັກທຸງປະເທດຝະລັ່ງຂຶ້ນແທນ. ຖ້ອຍຄຳອັນສວຍສົດງົດງາມທີ່ວ່າ ຮັບຮູ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມວ່າເປັນປະເທດທີ່ມີອິດສະຫລະພາບ, ອໍ້ຕົກລົງ ແລະ ສັນຍາສັນຕິພາບ ຊຶ່ງລັດຖະບານຝະລັ່ງເຊັນກັບສາທາລະນະລັດໜຸ່ມນ້ອຍ, ທັງໝົດນີ້ຖືກພວກລ່າເມືອງຂຶ້ນຢຽບຢ່ຳຢ່າງບັງອາດ . ໂດຍພະຍາຍາມຢາກກັບຄືນມາປົກຄອງຫວຽດນາມນັ້ນ, ພວກເຂົາໄດ້ກາວເຂົ້າສູ່ ເສັ້ນທາງແຫ່ງການຮຸກຮານໂດຍກົງ.

ກາງຄືນຂອງວັນທີ ໒໐ ເດືອນທັນວາ, ໃນຂະນະທີ່ການສູ້ຮົບພວມດຳເນີນຢູ່ທົ່ວເຂດຊຸມຮ່າໂນ້ຍຢູ່ນັ້ນ ວິທະຍຸ "ສຽງຫວຽດນາມ" ທີ່ກະຈາຍສຽງມາຈາກໝູ່ບ້ານ ໃກ້ເມືອງຮ່າໂນ້ຍ ໄດ້ສົ່ງຄຳຮຽກຮ້ອງຄັ້ງປະຫວັດສາດຂອງປະທານໂຮ່ຈີ້ມິນ ທີ່ສົ່ງເຖິງປະຊາຊົນໃນຊາດ.

"ພວກເຮົາຕ້ອງການສັນຕິພາບ, ພວກເຮົາຈຶ່ງທຳການປະນີປະນອມ. ແຕ່ພວກເຮົາຍິ່ງປະນີປະນອມເທົ່າໃດ ພວກລ່າເມືອງຂຶ້ນຝະລັ່ງກໍ່ຍິ່ງກະຫາຍ ຢ່າງບໍ່ສິ້ນສຸດເທົ່ານັ້ນ, ທັງນີ້ກໍ່ຍ້ອນພວກເຂົາພິປອງຢາກຍາດເອົາປະເທດເຮົາອີກເທື່ອໜຶ່ງ!

ພໍແລ້ວ ! ພວກເຮົາຍອມເສຍທຸກສິ່ງທຸກຢ່າງ, ແຕ່ເດັດຂາດບໍ່ຍອມເສຍເອກະລາດແຫ່ງຊາດ, ເດັດຂາດບໍ່ຍອມເປັນຂ້າທາດ. ເພື່ອນຮ່ວມຊາດທັງຫລາຍຈົ່ງລຸກຂຶ້ນຕໍ່ສູ້!... ໃຜມີປືນກໍໃຊ້ປືນ, ໃຜມີດາບກໍໃຊ້ດາບ, ຖ້າບໍ່ມີດາບກໍໃຊ້ຂອບ ແລະ ໄມ້

ຄ້ອນເຫົ້າ ທຸກຄົນຕ້ອງລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຟະລັ່ງ ເພື່ອກອບກູ້ປະເທດຊາດ...

ເຖິງແມ່ນວ່າສົງຄາມຕໍ່ຕ້ານຈະລຳບາກຍາກແຄ້ນກໍຕາມ ແຕ່ວ່າໃນການຕໍ່ສູ້ຢ່າງເສຍສະຫລະ ປະຊາຊົນຂອງພວກເຮົາຈະໄດ້ຮັບໄຊຊະນະ ຫວຽດນາມເອກະລາດແລະເອກະພາບ ຫມັ້ນຍືນ !".

ສົງຄາມ

ວັນທີ ໒໐ ເດືອນທັນວາ ປີ ໑໙໔໖ ໄດ້ຖືກບັນທຶກໄວ້ໃນປະຫວັດສາດ ຫວຽດນາມ ວ່າເປັນວັນເລີ່ມຕົ້ນແຫ່ງສົງຄາມຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງໃນລະດັບທົ່ວປະເທດ. ສົງຄາມຕໍ່ຕ້ານທີ່ພິລະອາດຫານ ແລະ ເສຍສະຫລະ ອັນເຕັມໄປດ້ວຍ ຄວາມຫຍຸງຍາກລຳບາກກາກກຳນາໆປະການ ໄດ້ແກ່ຍາວມາເກືອບເກົ້າປີ. ຫລາຍປີ ຕໍ່ມາ ສະຫາຍ ຟາມວັນດົງ ໄດ້ຂຽນໄວ້ວ່າ: "ປະທານໂຮ່ຈີມິນ ເປັນຜູ້ປຸກລະດົມໃຈ ຢູ່ໃນມະຫາສົງຄາມຂອງປະຊາຊົນ ເຊິ່ງເປັນການຕໍ່ສູ້ຂອງພວກເຮົາ ເພື່ອອິດສະຫລະພາບ. ປະທານໂຮ່ຈີມິນ ຢູ່ໃນຈິດໃຈຂອງນັກຮົບ ຢູ່ທີ່ແນວໜ້າ, ຂອງກອງຫລອນຢູ່ເຂດແນວຫລັງສັດຕູ, ຂອງກຳມະກອນ ໃນໂຮງຈັກໂຮງງານ, ຂອງຊາວນາຢູ່ທີ່ທົ່ງນາ".

ປຶ້ມບັນທຶກເຫດການປະຫວັດສາດໄດ້ບັນທຶກວິລະກຳ ຊຶ່ງບໍ່ອາດຈະລືມໄດ້ ຂອງບັນດານັກຮົບປ້ອງກັນເມືອງຮ່າໂນ້ຍ ໃນສົງຄາມຕໍ່ຕ້ານ. ກອງບັນຊາການກອງທັບ ຝະລັ່ງຄາດວ່າ ພາຍໃນ ໒໔ ຊົ່ວໂມງ ພວກເຂົາຈະສາມາດຄວບຄຸມນະຄອນຮ່າໂນ້ຍທັງ

ໝົດໄດ້. ແຕ່ວ່າ ໃນຕົວຈິງ ເລີຍມາເປັນສອງເດືອນ ພວກເຂົາຈຶ່ງປະຕິບັດຄວາມຄິດດັ່ງກ່າວເປັນຈິງໄດ້. ໃນວັນທີ ໑໙ ເດືອນທັນວາ, ຄືນຕໍ່ມາ ຫລັງຈາກໄດ້ຮັບຟັງ ຄຳຂາດຂອງຝະລັ່ງ ນັກຮົບທະຫານລາດກອງຫລອນຂອງຮ່າໂນ້ຍທັງໝົດ ໄດ້ເຕົ້າໂຮມກັນທີ່ຕຶກສຳນັກງານກຳແພງນະຄອນ. ນັກຮົບສາບານຕົວວ່າຈະຈົງຮັກພັກດີຕໍ່ປະເທດຊາດ, ປະກາດວ່າ ເຂົາເຈົ້າຕຽມພ້ອມສູ້ຮົບ ຈົນເຖິງເລືອດຢອດສຸດທ້າຍ ເພື່ອປົກປັກຮັກສານະຄອນຫລວງ ແລະ ຄອຍຮັບຄຳສັ່ງຂອງລັດຖະບານ.

ການສູ້ຮົບໃນຊົ່ວໂມງທຳອິດນັ້ນ ໄດ້ເຮັດໃຫ້ພວກລ່າເມືອງຂຶ້ນຝະລັ່ງ ເຫັນວ່າພວກເຂົາໄດ້ພົບພໍ້ກັບຄູ່ຕໍ່ສູ້ ເຊິ່ງເຖິງວ່າ ຂາດເຂີນອາວຸດ ແລະ ບໍ່ຊຳນານ ໃນການສູ້ຮົບກໍຕາມ, ແຕ່ກໍຕຽມພ້ອມເສຍສະຫລະຊີວິດ ແລະ ສ້າງວິລະກຳແບບເປັນ ຂະບວນເພື່ອປະເທດຊາດ. ການປິດລ້ອມພະລາຊະວັງບັກໂບຟູ ໄດ້ແກ່ຍາວຫລາຍວັນ. ຝະລັ່ງຕ້ອງໃຊ້ລົດຖັງ ແລະ ລົດຫຸ້ມເກາະເພື່ອຍຶດຄອງສຳນັກງານແຫ່ງນັ້ນ. ໃນເວລາ ນັ້ນທາງຝ່າຍຫວຽດນາມ ມີພຽງແຕ່ທະຫານສອງໝວດເທົ່ານັ້ນ ທີ່ຕ້ານທານໄວ້. ລູກປືນໃຫຍ່ໄດ້ຍິງທຳລາຍກຳແພງພະລາຊະວັງ. ແຕ່ປານນັ້ນ ທະຫານຝະລັ່ງກໍບໍ່ກ້າ ຕະລຸມບອນ. ນັກຮົບຫວຽດນາມປ້ອງກັນພະລາຊະວັງຈົນຮອດຄົນສຸດທ້າຍ ໂດຍຍິງດັບສູນສັດຕູກວ່າ ໑໐໐ ຄົນ.

ໃນວັນທີ ໖ ເດືອນມັງກອນ ການສູ້ຮົບຢູ່ບັ້ນທ່ອງຖະໜົນໄດ້ດຳເນີນໄປ ຢ່າງດຸເດືອດທີ່ສຸດ ແຕ່ກຳລັງປະກອບອາວຸດທັງໝົດທີ່ມີໜ້າຢູ່ໃນນະຄອນໄດ້ຮວບຮວມກັນເຂົ້າເປັນ "ກອງພັນນະຄອນຫລວງ", ກອງພັນດັ່ງກ່າວພາຍລຸນມາໄດ້ກາຍເປັນ ກອງພັນໜຶ່ງທີ່ລືຊາຜາກົດ. ກອງພັນມີໜ້າທີ່ປົກປັກຮັກສານະຄອນຫລວງ. ກອງພັນ ປະກອບດ້ວຍທະຫານຫລວງ ແລະ ກອງທະຫານລາດກອງຫລອນ, ຈຳນວນພົນ ໗໐%ຂອງກອງພັນແມ່ນກຳມະກອນ. ນັກຮົບໜຸ່ມນ້ອຍ ໘.໕໐໐ ຄົນ ໄດ້ປະກອບອາວຸດດ້ວຍປືນເຫລັກຍາວ ພຽງແຕ່ ໑.໕໐໐ ກະບອກ. ແຕ່ເຂົາເຈົ້າໄດ້ສູ້ຮົບຢ່າງເດັດດ່ຽວ ໂດຍປ້ອງກັນແຕ່ລະເສັ້ນທາງ, ແຕ່ລະເຮືອນ ເພື່ອສະກັດກັ້ນການບຸກລຸກຂອງສັດຕູ.

ແບບຢ່າງສູ້ຮົບອັນພິລະອາດຫານຂອງນັກຮົບປ້ອງກັນນະຄອນຫລວງ ໄດ້ຖືກ ປະຊາຊົນຢູ່ນະຄອນອື່ນໆປະຕິບັດຕາມ. ກອງທະຫານທີ່ປົກປັກຮັກສານະຄອນ ເວ້ ກໍສູ້ຮົບຈົນຮອດທ້າຍເດືອນກຸມພາ. ນັກຮົບທະຫານລາດກອງຫລອນຫລາຍຄົນ ເຊິ່ງຈັດຕັ້ງ ຂຶ້ນໂດຍສະມາຄົມສາມລໍ້ ໄດ້ເປັນແວ່ນແຍງອັນອາດຫານທີ່ສຸດ. ປະຊາຊົນນະຄອນນາມດິງ

ທີ່ເປັນສູນກາງຕ່ຳແຜ່ນຕີໂຕ້ຄືນການບຸກໂຈມຕີຂອງສັດຕູນັບເປັນເວລາສາມເດືອນ.

ການສູ້ຮົບຕໍ່ຕ້ານຢ່າງພິລະອາດຫານຂອງກອງກຳລັງປະກອບອາວຸດຢູ່ທີ່ຮ່າໂນ້ຍ, ເວ້, ນາມດິງ ໄດ້ອຳນວຍໃຫ້ຍາດແຍ່ງເອົາເວລາ ເພື່ອຂົນຍ້າຍວັດຖຸສິ່ງຂອງທັງໝົດອັນຈຳເປັນ ຊຶ່ງອາດຈະຂົນຍ້າຍໄປໄດ້ ຂຶ້ນໄປເຂດພູຜາປ່າດົງ ເພື່ອສ້າງຕັ້ງ ຖານທີ່ໝັ້ນຕໍ່ຕ້ານ. ຮອດເດືອນມີນາປີ ໑໙໔໗ ເມື່ອລັດຖະບານອອກຄຳສັ່ງໃຫ້ຖອນອອກຈາກຮ່າໂນ້ຍ ກຳມະກອນໄດ້ແບກຫາມວັດຖຸສິ່ງຂອງຕ່າງໆ, ເຄື່ອງຈັກເຄື່ອງລານ, ວັດຖຸດິບ, ເຄື່ອງມື, ອຸປະກອນອັນສຳຄັນເປັນພັນໆໂຕນ ໄປຍັງເຂດກອງຫລອນ. ເຂົາເຈົ້າຈັດຕັ້ງໜ່ວຍຕະລຸມບອນເຊິ່ງໃນຕອນກາງຄືນ ຫລອນເລັດລອດເຂົ້າໄປໃນນະຄອນທີ່ຖືກຝະລັ່ງບຽດຍຶດ ຊອກເອົາເຄື່ອງຈັກເຄື່ອງລານທີ່ໄດ້ມ້າງອອກແລ້ວ ແລະເຄື່ອງອາໄຫລ່ຢູ່ຕາມໂຮງຈັກໂຮງງານທີ່ຖືກທຳລາຍເສຍຫາຍໜັກ, ຈາກນັ້ນເຂົາເຈົ້າ ກໍ່ເລັດລອດເຂົ້າປ່າເລິກຢ່າງປິດລັບ. ນັກມູດນ້ຳສະໝັກໃຈມູດລົງພື້ນນ້ຳບ່ອນທີ່ກຳປັ່ນຍີ່ປຸ່ນຫລົ້ມຢູ່ອ່າວ ຕົງແກງ ໃນປາງສົງຄາມໂລກຄັ້ງທີສອງ ເພື່ອເອົາເຄື່ອງຈັກ ເຄື່ອງຈັກໄຟຟ້າເຄື່ອງປະກອບດ້ວຍໂລຫະອື່ນໆ. ວັດຖຸທັງໝົດດັ່ງກ່າວກໍຖືກຂົນສົ່ງດ້ວຍວິທີອັນສັບສົນ ທີ່ສຸດ, ບາງເທື່ອກໍ່ເຖິງຂັ້ນເສຍຊີວິດ ຈຶ່ງສາມາດນຳກັບໄປຫາໂຮງຈັກທີ່ຕັ້ງຢູ່ໃນປ່າເພື່ອທຳການຜະລິດອາວຸດ ແລະ ສິ່ງຂອງອື່ນໆອັນຈຳເປັນໃຫ້ແກ່ສົງຄາມ ແລະ ການເຄື່ອນໄຫວເສດຖະກິດໃນເຂດປົດປ່ອຍ.

ພາຍຫລັງກໍ່ສົງຄາມຮຸກຮານແລ້ວ ພວກລ່າເມືອງຂຶ້ນຝະລັ່ງ ໄດ້ວາງແຜນ ວ່າໂດຍອີງອາໄສທ່າເໜືອທາງດ້ານການປະກອບອາວຸດ ແລະ ຈຳນວນທະຫານ, ໃນໄລຍະສັ້ນຈະຕີທັບມ້າງ ແລະ ດັບສູນກອງທັບຫວຽດນາມທີ່ຂາດເຂີນອາວຸດ ແລະມີບົດຮຽນສູ້ຮົບໜ້ອຍ, ຈັບຜູ້ນຳພາສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ແລະ ເຮັດໃຫ້ບັນຫາຫວຽດນາມໝົດສິ້ນໄປ. ແຕ່ວ່າ ແຜນການເຮັດສົງຄາມແບບສາຍຟ້າແລບ ຂອງພວກເຂົາ ໄດ້ຖືກທຳລາຍໃນລະຫວ່າງອາທິດທຳອິດຂອງການຕໍ່ຕ້ານ. ເຖິງແມ່ນວ່າມາຮອດກາງປີ ໑໙໔໗, ນອກຈາກເຂດອັນກວ້າງໃຫຍ່ຢູ່ນາມໂບ ແລະຈຸງໂບ, ຍັງມີເຂດສຳຄັນອີກຈຳນວນໜຶ່ງຢູ່ບັກໂບ (ລຽບຕາມຊາຍແດນຫວຽດນາມ-ຈີນ, ນະຄອນ ຮ່າໂນ້ຍ, ນະຄອນໄຮຟອງ, ນາມດິງ ແລະ ສູນກາງໃຫຍ່ອື່ນໆຈຳນວນໜຶ່ງ) ທີ່ຕົກ ຢູ່ໃນກຳມືຂອງພວກລ່າເມືອງຂຶ້ນຝະລັ່ງນັ້ນກໍ່ຕາມ ແຕ່ສາທາລະນະລັດ ປະຊາທິປະໄຕຫວຽດນາມ ກໍຍັງຄົງຕົວຢູ່. ປະຊາຊົນຫວຽດນາມກໍຍັງສືບຕໍ່ສູ້ຮົບ ຢ່າງພິລະອາດຫານ

ເພື່ອປົກປັກຮັກສາເອກະລາດ ແລະ ອະທິປະໄຕຂອງປະເທດຊາດ.

ເມື່ອສົງຄາມເລີ່ມຕົ້ນ ລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ຍ້າຍອອກຈາກຮ່າໂນ້ຍ ເບື້ອງຕົ້ນໄປຕັ້ງຢູ່ ຮ່າດົງ ຫ່າງຈາກຮ່າໂນ້ຍໄປທາງ ຕາເວັນຕົກສຽງໃຕ້ຫລາຍສິບກິໂລແມັດ. ແຕ່ມາຮອດລະດູບານໃໝ່ປີ ໑໙໔໗ ໃນເວລາທີ່ພວກລ່າເມືອງຂຶ້ນຝະລັ່ງ ໄດ້ບຸກຍຶດເອົານະຄອນສຳຄັນຂອງປະເທດ ສິ່ງທີ່ຈະແຈ້ງ ກໍ່ແມ່ນວ່າຈະຕ້ອງສູ້ຮົບອີກຍາວນານ, ສະນັ້ນກອງເສນາທິການຕໍ່ຕ້ານ ໂດຍມີປະທານໂຮ່ຈີມິນ ເປັນຫົວໜ້ານັ້ນ ຈຶ່ງຈຳເປັນຕ້ອງກັບຄືນໄປຫວຽດບັກ ຊຶ່ງເປັນສະຖານທີ່ມີຖານທີ່ໝັ້ນກອງຫລອນອັນຮັບປະກັນໄດ້ ແລະ ໄດ້ຜ່ານການທົດສອບມາໃນຫລາຍປີ.

ເຖິງຈະມີອາຍຸເກືອບ ໖໐ ປີ ແລະ ສຸຂະພາບອ່ອນເພຍກໍຕາມ, ແຕ່ໃນເວລາອັນລຳບາກຍາກແຄ້ນດັ່ງກ່າວ ປະທານໂຮ່ຈີມິນກໍຍັງເປັນແບບຢ່າງຂອງຄວາມມານະອົດທົນ. ເພິ່ນຜ່ານຜ່າຄວາມລຳບາກຍາກເຂັນ ຂອງຊີວິດກອງຫລອນ ຊຶ່ງມື້ນີ້ຢູ່ບ່ອນນີ້ ມື້ອື່ນຢູ່ບ່ອນໃໝ່ໄປໄດ້ຢ່າງງ່າຍດາຍ. ນັກຮົບປ້ອງກັນຂອງເພິ່ນໄດ້ເລົ່າຄືນຕໍ່ໄປນີ້ວ່າ:

"ເມື່ອມາຮອດເຂດທີ່ຢູ່ໃຕ້ການຄວບຄຸມຂອງກອງຫລອນແລ້ວນັ້ນ, ພວກເດີນທາງຮ່ວມນຳລຸງ ມີແຕ່ແປດຄົນເທົ່ານັ້ນ ຊຶ່ງທັງທຳໜ້າທີ່ປ້ອງກັນ, ທັງຕິດຕໍ່ ແລະແຕ່ງກິນ. ພວກເຮົາໄດ້ປຸກຕູບໄມ້ໄຜ່ໜຶ່ງຫລັງ ຂຶ້ນເປັນສອງຫ້ອງ. ເຄິ່ງໜຶ່ງສຳລັບໃຫ້ ລຸງນອນ ແລະ ເຮັດວຽກ, ອີກເຄິ່ງໜຶ່ງທັງເປັນຫ້ອງນອນ, ຫ້ອງກິນເຂົ້າ ແລະ ຫ້ອງ ປະຊຸມສຳລັບພວກເຮົາ. ວຽກງານປ້ອງກັນໃນເວລານັ້ນມີຫລາຍດ້ານ ເຊັ່ນກຽມພ້ອມຕ້ານຄືນການບຸກລຸກຂອງພວກສັດຕູທີ່ອາດເປັນໄປໄດ້ ຄົ້ນຫານັກສືບສອດແນມ, ປ້ອງກັນ ສຳນັກງານນັບທັງສັດປ່ານຳອີກ. ທ່ານຫວງຮິວນາມ (ຮອງລັດຖະມົນຕີກະຊວງພາຍໃນ ເວລານີ້) ໄດ້ເອົາໝາມາໃຫ້ພວກເຮົາ, ແຕ່ຢູ່ໄດ້ໄລຍະສັ້ນໆເສືອກໍມາຄາບເອົາໄປ ກິນຊ້ຳ.

ຊີວິດການເປັນຢູ່ຂອງພວກເຮົາ ພົບຂໍ້ຫຍຸ້ງຍາກຫລາຍປະການ. ແຕ່ລະວັນ ກິນເຂົ້າແດກກັບຕົ້ນຜັກປ່າ...ຫລືກໍຊຸບຜັກ. ສ່ວນຊຸບ ຜັກໃຫ້ນຸ່ມເອືອບເກືອກັບໝາກເພັດເພື່ອເກັບໄວ້ເປັນອາຫານສຳຮອງ. ລຸງໂຮ່ ເອີ້ນມັນແກມຕະຫລົກວ່າ"ກະປ໋ອງຫວຽດມິນ".

26–546

ໂດຍເຂົ້າໃຈເປັນຢ່າງດີວ່າ ໃນໄລຍະຕົ້ນຂອງການຮຸກຮານນັ້ນ ພວກລ່າເມືອງຂຶ້ນມີທ່າເໜືອທາງດ້ານການທະຫານຢ່າງແນ່ນອນ. ດ້ວຍເຫດນັ້ນ, ປະທານ ໂຮ່ຈິມິນ ແລະ ຄະນະປະຈຳຄະນະບໍລິຫານງານສູນກາງພັກ ຈຶ່ງຕົກລົງກັນຈະນຳເອົາຍຸດທະສາດຂອງສົງຄາມຕໍ່ຕ້ານໄລຍະຍາວຂອງທົ່ວປວງຊົນ ເຊິ່ງໝູນໃຊ້ວິທີຕີແບບກອງຫລອນ ນັ້ນມາຕ້ານຢັນ ແຜນການສົງຄາມແບບສາຍຟ້າແລບ ຂອງທະຫານສັດຕູ. ເພິ່ນເວົ້າວ່າ ບໍ່ວ່າສົງຄາມກອງຫລອນອັນໃດກໍຕາມ ສິ່ງສຳຄັນນັ້ນບໍ່ແມ່ນວ່າຮັກສາດິນດອນຕອນໜຶ່ງໄວ້ເທົ່ານັ້ນ ແຕ່ຫາກຊອກຫາວິທີທາງເພື່ອຮັກສາອົງການແຫ່ງອຳນາດປະຕິວັດ, ກຳລັງປະກອບອາວຸດຂອງປະຊາຊົນ ແລະ ຖານທີ່ໝັ້ນຕໍ່ຕ້ານໄວ້ຢ່າງແໜ້ນໜາ. ເພິ່ນເນັ້ນໜັກວ່າ ມີພຽງແຕ່ ແນວທາງດັ່ງກ່າວເທົ່ານັ້ນ ຈຶ່ງຈະຊ່ວຍຕອບໂຕ້ການບຸກໂຈມຕີອັນດຸເດືອດຂອງພວກຮຸກຮານໃນເບື້ອງຕົ້ນ ແລ້ວຈາກນັ້ນກໍກ້າວໄປສູ່ການຕ່າວໂຈມຕີ ລົງຕົດສິນຊີ້ຂາດເທື່ອລະກ້າວ. ສຳລັບພວກທີ່ຍັງບໍ່ເຂົ້າໃຈຄວາມຈຳເປັນ ທີ່ຈະຕ້ອງ ຕໍ່ຕ້ານຍາວນານນັ້ນເພິ່ນອະທິບາຍວ່າ:

"ພວກເຮົາບໍ່ຄວນຕີລາຄາກຳລັງແຮງຂອງພວກເຮົາເກີນຄວາມຈິງແລ້ວບຸກເຂົ້າໂຈມຕີສັດຕູຢ່າງບັງອາດ. ເວລານີ້ ພວກເຮົາຄືຜູ້ຊາຍພວມສອນຍ່າງ, ສ່ວນສັດຕູນັ້ນຄືຄົນເຖົ້າໃຈດຳອຳມະຫິດ ແລະ ເລິກແລບ. ເມື່ອກຳລັງເຮົາເຂັ້ມແຂງທີ່ກັບຜູ້ຊາຍອາຍຸ ໒໐ ປີສ່ວນສັດຕູຊໍ້າພັດເຖົ້າແກ່ຊະລາລົງ, ຮອດຍາມນັ້ນພວກເຮົາຈຶ່ງສວຍໂອກາດ ທີ່ເອື້ອອຳນວຍ ແລ້ວໂມງບາດຄ່ອນມັດບສູນພວກສັດຕູ. ໃນປະຫວັດສາດອັນພິລະອາດຫານຂອງຊາດເຮົາ ກໍມີເຫດການອັນສະຫງ່າງາມບໍ່ໜ້ອຍມາແລ້ວ. ເວລານີ້, ພວກເຮົາຕ້ອງຮ່ຳຮຽນເອົາບົດຮຽນຂອງ ຈຽວກວາງຟຸກ ກ່ຽວກັບຍຸດທະວິທີດຳເນີນສົງຄາມ ໄລຍະຍາວນານ".

ເພື່ອປະຕິບັດຕາມແນວທາງ ສົງຄາມຕໍ່ຕ້ານອັນຍາວນານ ທີ່ນຳໃຊ້ວິທີ ດຳເນີນສົງຄາມແບບກອງຫລອນຢ່າງກວ້າງຂວາງນັ້ນ, ກຳລັງປະກອບອາວຸດສາມປະເພດ ທີ່ສອດຄ່ອງກັບເງື່ອນໄຂພິເສດຂອງຫວຽດນາມໄດ້ຖືກຈັດຕັ້ງຂຶ້ນ, ນັ້ນແມ່ນທະຫານຫລວງ, ທະຫານທ້ອງຖິ່ນ ແລະ ທະຫານລາດກອງຫລອນ. ກຳລັງປະກອບອາວຸດ ແລະ ເຄື່ອງປະກອບອາວຸດດັ່ງກ່າວໄດ້ເຄື່ອນໄຫວຮ່ວມກັນ ແລະ ເພິ່ງພາອາໄສກັນ. ກອງທັບຫລວງໄດ້ຖືກກຽມພ້ອມເປັນຢ່າງດີ, ເປັນບ່ອນອີງໃຫ້ແກ່ທະຫານລາດກອງຫລອນ ແລະ ທະຫານທ້ອງຖິ່ນໄດ້ເຄື່ອນໄຫວຢ່າງເປັນເຈົ້າຕົນເອງຢູ່ຕາມເຂດທ້ອງຖິ່ນ, ທະຫານລາດ

ກອງຫລອນ ແລະ ທະຫານທ້ອງຖິ່ນທຳການບຸກໂຈມຕີຮຸນແຮງ ເພື່ອຕັດກຳລັງຂອງສັດຕູເທື່ອລະນ້ອຍ, ບັງຄັບໃຫ້ພວກເຂົາແຕກສະຫລຸຍຜ່າຍ ແລະ ຈາກນັ້ນກໍສ້າງ ເງື່ອນໄຂໃຫ້ທະຫານຫລວງກະກຽມ ແລະ ປະຕິບັດຂັ້ນຮົບໃຫຍ່.

ມາຮອດກາງປີ ໑໙໔໗ ກຳລັງປະກອບອາວຸດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ມີນາຍທະຫານ ແລະ ພົນທະຫານໜຶ່ງແສນກວ່າຄົນ. ນັກຮົບຕັ້ງເປັນຫລາຍໆແສນຄົນປະກອບເປັນກອງຫນຸນ ແລະ ກອງທະຫານລາດກອງຫລອນ. ການຕໍ່ຕ້ານນັບມື້ນັບມີລັກສະນະທົ່ວປວງຊົນ. ການທີ່ຈຳນວນສະມາຊິກຂອງພັກ ນັບມື້ ເພີ່ມຂຶ້ນນັ້ນ ເປັນສິ່ງທີ່ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າເວລານັ້ນຫຍຸ້ງຍາກສຸດຂີດກໍຕາມ ແຕ່ປະຊາ-ຊົນຫວຽດນາມ ກໍເຊື່ອໝັ້ນຕໍ່ໄຊຊະນະ, ທັງເປັນສິ່ງທີ່ພິສູດໃຫ້ເຫັນວ່າ ອິດທິພົນ ຂອງພັກກອມມູນິດ ເຊິ່ງເປັນກຳລັງຈັດຕັ້ງຂອງປະຊາຊົນເຕີບໃຫຍ່ຂຶ້ນອັກໄຊ. ໃນປີ ໑໙໔໖ ຈຳນວນສະມາຊິກພັກໃນທົ່ວປະເທດມີແຕ່ ໒໐ ພັນຄົນເທົ່ານັ້ນ, ຈາກນັ້ນໜຶ່ງປີຕົວເລກດັ່ງກ່າວໄດ້ເພີ່ມຂຶ້ນເຖິງ ໕໐ ພັນ.

ຍາມໃດປະທານໂຮ່ຈີມິນ ກໍຢາກເຮັດໃຫ້ພັກສຳເລັດບົດບາດເປັນ ກອງລະວັງໜ້າທາງການເມືອງອັນແທ້ຈິງຂອງປະຊາຊົນ ໃນການຕໍ່ສູ້ກູ້ຊາດຢ່າງມີກຽດ. ເພິ່ນເອງເປັນຫ່ວງເປັນໃຍຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍນຳການເປີດກວ້າງ ແລະ ປັບປຸງຖັນແຖວພະນັກງານຂອງພັກ. ເພິ່ນຊອກຫາວິທີທາງ ເຮັດໃຫ້ສະມາຊິກພັກທຸກຄົນ ເປັນເອກະພາບກັນນຳເປົ້າໝາຍສູ້ຮົບ ຊຶ່ງພັກໄດ້ຍົກຂຶ້ນ. ໃນ "ຈົດໝາຍເຖິງສະຫາຍທີ່ຢູ່ ຫວຽດນາມພາກເໜືອ" ທີ່ຂຽນໃນເດືອນມີນາ ປີ ໑໙໔໗ ເພິ່ນເນັ້ນໜັກວ່າ: "ໃນຊ່ວງໄລຍະທີ່ຕັດສິນອະນາຄົດຂອງປະເທດພວກເຮົາ ວ່າຈະມີຊີວິດຢູ່ຫລືຕາຍໄປ, ຈະຖືກດັບສູນ ຫລືຄົງຕົວຢູ່, ແຕ່ລະສະຫາຍ ແລະ ກໍຄືພັກທັງໝົດ ຕ້ອງອຸທິດກຳລັງໃຈກໍຄືກຳລັງກາຍທັງໝົດ ເພື່ອນຳພາທົ່ວປວງຊົນທັນໄປສູ່ເປົ້າໝາຍອັນດຽວຄື ປຸກລະດົມປະຊາຊົນ ໃຫ້ລຸກຮືຂຶ້ນຕໍ່ສູ້ຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ແລະ ຍາດເອົາຄວາມເປັນເອກະພາບແລະເອກະລາດມາໃຫ້ປະເທດຊາດ".

ເພິ່ນຮຽກຮ້ອງໃຫ້ສະມາຊິກພັກຕ້ອງມີຫູແຈ້ງຕາໃສ, ຮອບຄອບ, ເດັດດ່ຽວ, ທຸ່ນທ່ຽງ, ມີຫົວຄິດປະດິດສ້າງ, ມີພັກໄຫວ, ມີລະບຽບວິໄນ, ອົດທົນຜ່ານຜ່າທຸກຂໍ້ຫຍຸ້ງ-ຍາກ, ຖະໜອມຖ່ອມຕົນຢູ່ຕະຫລອດເວລາ ແລະ ປະຕິບັດຕາມຄຳສອນຂອງ ເລນິນທີ່ວ່າ: "ຮຽນ, ຮຽນແລ້ວ, ຮຽນອີກ". ປະທານໂຮ່ຈີມິນ ໄດ້ສັ່ງສອນໃຫ້ນັກກອມມູນິດ

ແຕ່ລະຄົນມີຄຸນສົມບັດສູງສົ່ງ, ເພິ່ນຖືວ່າ ຄຸນລັກສະນະຂອງນັກກອມມູນິດແຕ່ລະຄົນຕ້ອງປະກອບດ້ວຍມະນຸດສະທຳ, ທ່ຽງທຳ, ກ້າຫານ ແລະ ສັດຊື່. ໃນປຶ້ມນ້ອຍທີ່ໃສ່ຊື່ວ່າ: "ການດັດແປງວິທີເຮັດວຽກ" ເຊິ່ງຂຽນຂຶ້ນໃນລະດູໃບໄມ້ຫລົ່ນປີ ໑໙໔໗ ເພິ່ນຊີ້ ໃຫ້ເຫັນວ່າ "ຖ້າບຸກຄົນໃດໜຶ່ງບໍ່ມີຄຸນສົມບັດສູງສົ່ງ ຜູ້ນັ້ນເຖິງຈະມີຄວາມສາມາດປານໃດກໍຕາມ ກໍຈະບໍ່ສາມາດນຳພາປະຊາຊົນໄດ້".

ເພິ່ນຍັງເອົາໃຈໃສ່ນຳຫລັກການໜຶ່ງອີກຄື "ພັກຕ້ອງປະຕິບັດວຽກງານ ຕາມແບບທະຫານ ຕ້ອງເປັນເອກະພາບກັນຢ່າງສົມບູນ ທັງທາງດ້ານແນວຄິດ ກໍຄືທາງດ້ານວຽກງານຕົວຈິງ. ພັກແມ່ນກອງລະວັງໜ້າ. ຖ້າໃນເວລາຕະລຸມບອນ ຜູ້ໜຶ່ງປະຕິບັດແນວໜຶ່ງ ແຕ່ອີກຜູ້ໜຶ່ງຊ້ຳພັດປະຕິບັດອີກແນວໜຶ່ງ ຈະຫວັງເອົາໄຊຊະນະ ຍ່ອມເປັນໄປບໍ່ໄດ້".

ປຶ້ມນ້ອຍທີ່ປະທານໂຮ່ຈີມິນ ຂຽນໄວ້ໃນຊຸມປີຕໍ່ຕ້ານຝະລັ່ງ ກ່ຽວກັບບັນຫາກໍ່ສ້າງພັກ, ວຽກງານສຶກສາອົບຮົມແນວຄິດໃຫ້ແກ່ນັກກອມມູນິດ ປະກອບສ່ວນເຮັດໃຫ້ ເຊີດຊູບົດບາດນຳພາ ແລະ ຄວາມສາມາດສູ້ຮົບຂອງພັກທີ່ເປັນຜູ້ຈັດຕັ້ງ ແລະ ຜູ້ນຳພາທຸກໄຊຊະນະຂອງການປະຕິວັດຫວຽດນາມ.

ໃນເວລາທີ່ປຸກລະດົມມະຫາຊົນຈັບອາວຸດລຸກຂຶ້ນຕໍ່ສູ້ຕ້ານພວກຮຸກຮານ, ລັດຖະບານສາທາລະນະລັດ ປະຊາທິປະໄຕຫວຽດນາມ ຍັງສືບຕໍ່ບຸກບືນແກ້ໄຂບັນຫາ ສາຍພົວພັນຫວຽດນາມ-ຝະລັ່ງ ດ້ວຍວິທີທາງການເມືອງ. ແມ່ນແຕ່ໃນຊ່ວງເວລາ ທີ່ໜ້າສະຫລົດໃຈ ພາຍຫລັງທີ່ຜູ້ບັນຊາການຝະລັ່ງຍື່ນຄຳຂາດ ໃນວັນທີ ໑໙ ເດືອນທັນວາ ປີ ໑໙໔໖ ຢູ່ທີ່ຮ່າໂນ້ຍແລ້ວ, ປະທານໂຮ່ຈີມິນກໍຍັງໄດ້ຊອກວິທີປົກປັກຮັກສາສັນຕິພາບ. ເພິ່ນສົ່ງສານຕ່າງໆກັນຫລາຍສະບັບ ໄປຫາເລອົງ ບະລຸມ ຫົວໜ້າລັດຖະບານຝະລັ່ງ ໃນເວລານັ້ນ ໂດຍຮຽກຮ້ອງໃຫ້ທ່ານຜູ້ນີ້ອອກຄຳສັ່ງຢຸດຍິງ, ຖອນທະຫານກັບຄືນທີ່ຕັ້ງ ທີ່ພວກເຂົາຍຶດເອົາກ່ອນວັນທີ ໑໙ ເດືອນທັນວາ ແລະ ສືບຕໍ່ການເຈລະຈາຄືນອີກ. ແຕ່ວ່າເລອົງ ບະລຸມ ພັດມິດງຽບ. ໃນເວລາຕໍ່ມາ, ເລອົງ ບະລຸມ ຊີ້ແຈງວ່າ ໂທລະເລກດັ່ງກ່າວມາເຖິງທ່ານບໍ່ທັນກັບເວລາ. ເປັນຂໍ້ແກ້ຕົວທີ່ຂາດເຫດຜົນທີ່ສຸດ. ເລອົງ ບະລຸມ ມີຄວາມສາມາດພຽງພໍທີ່ຈະເຮັດໃຫ້ ອັກຊັງລີເຢີ ແລະ ພວກທີ່ສະໜັບສະໜູນເອົາຢ່າງຂະມັງຂະມີຍຸຕິການບຸກໂຈມຕີ. ແຕ່ເພິ່ນພັດບໍ່ເຮັດໃນສິ່ງດັ່ງກ່າວ.

ທ່າທີຂອງວົງການກຳອຳນາດຝະລັ່ງ ກ່ຽວກັບຂໍ້ສະເໜີສັນຕິພາບຂອງສາທາລະ

ນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ສະແດງອອກຢ່າງຈະແຈ້ງທີ່ສຸດໃນການດຳເນີນງານຂອງອັນທີ່ເອີ້ນວ່າ "ຄະນະທູດສັນຕິພາບ" ຂອງສາດສະດາຈານໂປນ ມູດ ໃນເດືອນ ພຶດສະພາ ປີ ໑໙໔໗. ອີງຕາມຄວາມຮຽກຮ້ອງຂອງຜູ້ແທນລັດຖະສະພາທີ່ເປັນນັກກອມມູນິດ, ລັດຖະບານຝະລັ່ງອອກຄຳສັ່ງໃຫ້ ໂບລາເອ ຂ້າຫລວງໃຫຍ່ ຄົນໃຫມ່ຂອງຝະລັ່ງ ທີ່ປະຈຳຢູ່ອິນດູຈີນ ຕິດຕໍ່ພົວພັນກັບ "ກຳລັງການເມືອງ ແລະ ກຳລັງ ປົນຍາຊົນຂອງຫວຽດນາມ" ທັງຫມົດ. ໂບລາເອ ແຕ່ງຕັ້ງສາດສະດາຈານ ໂປນ ມູດ , ອະດີດຜູ້ອຳນວຍການໂຮງຮຽນ ຊັ້ນສູງຂອງອາຊີອາຄະເນຢູ່ອິນດູຈີນ ຂຶ້ນໄປພົບປະທານໂຮ່ຈີມິນຢູ່ຫວຽດບັກ. ໂປນ ມູດ ຍື່ນເງື່ອນໄຂທີ່ມີລັກສະນະຄຳຂາດ ກ່ຽວກັບ ການຢຸດຍິງຕໍ່ປະທານໂຮ່ຈີມິນ ໃນນັ້ນມີຫລາຍຈຸດເອົາປຽບທີ່ສຸດ ດັ່ງຕໍ່ໄປນີ້:

- ປົດອາວຸດກອງທັບຫວຽດນາມ;
- ກອງທະຫານຝະລັ່ງມີສິດ ໃນການເຄື່ອນຍ້າຍ ຢູ່ເທິງດິນແດນ ຫວຽດນາມຢ່າງເສລີ;
- ມອບສິ່ງທະຫານຝະລັ່ງ ແລະ ທະຫານຕ່າງດ້າວທັງຫມົດ ທີ່ເຂົ້າຂ້າງຝ່າຍຕໍ່ຕ້ານ;
- ປົດປ່ອຍຊາວຝະລັ່ງ ແລະ ຊາວຫວຽດນາມ ທີ່ຮ່ວມງານນຳຝະລັ່ງ.

ຫລັງຈາກຄົ້ນຄວ້າເງື່ອນໄຂດັ່ງກ່າວແລ້ວ, ປະທານໂຮ່ຈີມິນ ໄດ້ເຊີນ ໂປນ ມູດ ໄປພົບ. ເພິ່ນເວົ້າສູ່ ໂປນ ມູດ ຟັງ:

"ຖ້າຮັບຮູ້ເງື່ອນໄຂຂອງພວກທ່ານ, ຂ້າພະເຈົ້າຈະເສຍກຽດຕິຍົດທັງຫມົດ ທີ່ມີຕໍ່ເພື່ອນຮ່ວມຊາດ ຂອງຂ້າພະເຈົ້າ. ຖ້າທ່ານຫາກຕົກຢູ່ໃນຖານະຄືຂ້າພະເຈົ້າ ແລ້ວທ່ານຈະຕອບຄືແນວໃດ ?"

"ປະທານເວົ້າຖືກ. ຂ້າພະເຈົ້າກໍຈະເຮັດຄືປະທານ. ຂ້າພະເຈົ້າ ຈະປະຕິເສດ".

"ສະນັ້ນ ຂໍໃຫ້ທ່ານຈົ່ງເວົ້າຄືຈິງຊຸ່ມນຳພະນະທ່ານ ໂບລາເອ ແລະຫວັງວ່າທ່ານຈະກັບມາອີກ ພ້ອມເງື່ອນໄຂທີ່ຮັບເອົາໄດ້. ຂ້າພະເຈົ້າກຽມພ້ອມຕ້ອນຮັບທ່ານ ສະເຫມີ".

ເປັນຫຍັງ ໂບລາເອ ຈຶ່ງຢາກຫລິ້ນຕະລົກຄືແນວນັ້ນ ? ສອງສາມມື້ຈາກນັ້ນມາທຸກຄົນລ້ວນແຕ່ຮູ້ຈັກແຈ້ງຈຸດຫມາຍຂອງເຂົາ. ພາຍຫລັງ ໂປນ ມູດ ກັບຄືນມາຮອດຮ່າ

ໂນ້ຍແລ້ວ, ໂບລາເຂ ລາຍງານຕໍ່ລັດຖະບານຝະລັ່ງວ່າ "ຂ້າພະເຈົ້າຊອກວິທີ ຕົກລົງກັບຫວຽດມິນ, ແຕ່ບໍ່ບັນລຸໝາກຜົນ. ຍັງອີກວິທີໜຶ່ງ ຄືລອງຕັ້ງຄວາມຫວັງນຳ ບາວດາຍ".

ໃນເດືອນສິງຫາ ປີ ໑໙໔໕, ໃນເວລາສະຫລະລາຊະສົມບັດ ບາວດາຍ ໄດ້ມີຂໍ້ຄວາມອັນຈັບງາມວ່າ "ເປັນພົນລະເມືອງຂອງປະເທດເອກະລາດ ຍັງດີກວ່າ ເປັນເຈົ້າຊີວິດຂອງປະເທດຂ້າທາດ". ແຕ່ມາຮອດເດືອນເມສາປີ ໑໙໔໖ ເສັ້ນທາງ ທີ່ພະອົງເດີນຮ່ວມກັບປະຊາຊົນໄດ້ສິ້ນສຸດລົງ. ກ່ອນເວລາທີ່ກອງທະຫານຝະລັ່ງ ຈະບຸກເຂົ້າຮ່າໂນ້ຍ ພະອົງ ໄດ້ຂີ່ຍົນອາເມລິກາໄປຈຸງແຂ້ງ. ເມື່ອສົງຄາມລະເບີດຂຶ້ນແລ້ວ, ປະທານໂຮ່ຈີມິນ ໄດ້ແຕ່ງຕັ້ງຜູ້ຕາງໜ້າໄປຮົ່ງກົງ ຊຶ່ງເປັນສະຖານທີ່ພັກເຊົາຂອງ ບາວດາຍ ໃນເວລານັ້ນ ແລະ ຮຽກຮ້ອງໃຫ້ພະອົງກັບຄືນປະເທດ ເຂົ້າຮ່ວມໃນການຕໍ່ຕ້ານຂອງທົ່ວປວງຊົນ, ແຕ່ພະອົງປະຕິເສດ. ໃນການທຳສົງຄາມຮຸກຮານຂອງຝະລັ່ງ, ພະອົງແນມເຫັນໂອກາດທີ່ຈະກັບຄືນມານັ່ງລາຊະບັນລັງ ຊຶ່ງການປະຕິວັດໄດ້ລົບລ້າງ ໄປແລ້ວ. ຄວາມຄິດອັນລີ້ລັບຂອງພະອົງ ແທດເໝາະກັບສິດຜົນປະໂຫຍດ ຂອງພວກລ່າເມືອງຂຶ້ນຝະລັ່ງ. ພວກເຂົາມອງເຫັນວ່າ ກະໂຕບາວດາຍ ເອງເປັນບຸກຄົນທີ່ອາດຈະເຕົ້າໂຮມກຸ່ມພັກຝ່າຍຊາດນິຍົມທັງໝົດ ແລະ ກຸ່ມນິຍົມຝ່າຍຕາເວັນຕົກ ຊຶ່ງມີຫລາຍ ສີສັນ, ແກ່ງແຍ່ງກັນລຽນຕິດຂອງຊົນຊັ້ນນາຍທຶນ ແລະ ເຈົ້າທີ່ດິນຫວຽດນາມ ເພື່ອຕ້ານຄືນລັດຖະບານໂຮ່ຈີມິນ.

ໂດຍມີເຈດຕະນາຢາກຈະສ້າງຕັ້ງລັດບໍລິວານໜຶ່ງຂຶ້ນຢູ່ຫວຽດນາມ ໂດຍແມ່ນອະດີດເຈົ້າຊີວິດ ບາວດາຍ ເປັນຫົວໜ້າ, ຄົນຝະລັ່ງກໍ່ລົງມືເຈລະຈາກັບ ບາວດາຍ ຊຶ່ງເປັນການເຈລະຈາທີ່ບໍ່ມີໃຜຄິດວ່າຈະແກຍາວຈົນຮອດເກືອບສອງປີ. ບັນຫານີ້ ກໍ່ແມ່ນຍ້ອນວ່າວໍຊິງຕັນຍື່ນມືເຂົ້າໃນເກມການເມືອງດັ່ງກ່າວ. ວໍຊິງຕັນ ເອງກໍຢາກໃຫ້ ບາວດາຍເປັນ "ບຸກຄົນຂອງຕົນ" ຢູ່ຫວຽດນາມ. ທາງຝ່າຍ ບາວດາຍ ນັ້ນ, ພະອົງຢາກດຶງດູດເອົາວົງການນາຍທຶນ ແລະ ເຈົ້າທີ່ດິນໃຫ້ໄດ້ຍິ່ງກວ້າງຂວາງເທົ່າໃດຍິ່ງດີ ມາເຂົ້າຝ່າຍຂອງຕົນເອງ, ສະນັ້ນຈຶ່ງຂຽວເຂັ້ນຫວງໃຫ້ຝະລັ່ງຮັບຮູ້ " ເອກະລາດ ຂອງຫວຽດນາມ" ເຖິງວ່າຈະເປັນພຽງແຕ່ຄຳເວົ້າກໍຕາມ. ພຽງແຕ່ໃນເດືອນມີນາປີ໑໙໔໙ ເທົ່ານັ້ນ, ບາວດາຍ ແລະ ປະທານາທິບໍດີຝະລັ່ງ ວ. ໂອຣິຢົງ ກໍ່ຕົກລົງກັນ ກ່ຽວກັບການຮັບຮູ້ "ເອກະລາດຂອງຫວຽດນາມ ໃນຂອບເຂດຂອງສະຫະພັນຝະລັ່ງ". ເອກະ

ລາດຊຶ່ງເມືອງແມ່ເປັນຜູ້ມອບໃຫ້ເຂົານັ້ນ ເປັນພຽງແຕ່ເອກະລາດຢູ່ເທິງແຜ່ນເຈ້ຍເທົ່ານັ້ນ ຍ້ອນວ່າ "ລັດຫວຽດນາມ" ບໍ່ມີສິດເສລີພາບ ໃນການດຳເນີນແນວທາງ ຕ່າງປະເທດແຕ່ຢ່າງໃດ. ໃນຕົວຈິງແລ້ວ ສົນທິສັນຍາທີ່ຕົກລົງກັນລະຫວ່າງ "ບາວດາຍ-ໂອຣິປີງ" ແມ່ນການຫັນປ່ຽນຫວຽດນາມມາເປັນເມືອງຂຶ້ນແບບໃໝ່ຂອງຝະລັ່ງ.

ຄະນະທູດ ໂປນ ມູດ ປຽບເໝືອນສາກລະຄອນ ຊຶ່ງພວກລ່າເມືອງຂຶ້ນ ເປັນຜູ້ສ້າງຂຶ້ນ ເພື່ອເປົ້າໝາຍຊອກຫາເຫດຜົນອັນ "ຖືກຕ້ອງຕາມກົດໝາຍ" ທີ່ຈະເລີ່ມສູ້ລົບຕ້ານຫວຽດບັກ ຊຶ່ງເປັນຖານທີ່ໝັ້ນຂອງການຕໍ່ຕ້ານ. ໃນວັນທີ ໗ ເດືອນ ຕຸລາ ປີ ໑໙໔໗ ທະຫານສາມກອງຂອງພວກລ່າເມືອງຂຶ້ນໄດ້ໂດດຈ້ອງລົງທີ່ເມືອງບັກການ, ເວົ້າລວມທະຫານສົ່ງນອກຝະລັ່ງມີຈຳນວນເຖິງ ໑໘.໐໐໐ ຄົນທີ່ເຂົ້າຮ່ວມໃນການສູ້ລົບ . ກອງບັນຊາການຝະລັ່ງ ຄາດຄະເນວ່າຈະຕີຍຶດເອົາຫວຽດບັກ ດ້ວຍກອງທະຫານທີ່ແບ່ງເປັນສອງປີກ, ເຮັດເປັນຄີ້ການຄີມເຄົ້າ. ປີກທີໜຶ່ງເຄື່ອນຂຶ້ນໄປຕາມແມ່ນ້ຳແດງແລະແມ່ນ້ຳໂລ, ປີກທີສອງ ເຄື່ອນອອກແຕ່ລາງເຊີນ ຕີແຫຍ່ຂຶ້ນຫວຽດບັກ. ເປົ້າໝາຍຂອງຂັ້ນຮົບແມ່ນການດັບສູນກຳລັງພື້ນຖານ ແລະ ລ້ອມຈັບກອງເສນາທິການຂອງການຕໍ່ຕ້ານທີ່ມີປະທານໂຮ່ຈິມິນເປັນຜູ້ນຳພາ.

ຂະນະທີ່ຜູ້ຕິດຕໍ່ຫາຍໃຈເຂົ້າໂອ່ງ ແລ່ນມາທີ່ສຳນັກງານລັດຖະບານຢ່າງຟ້າວຟັ່ງ ເພື່ອລາຍງານວ່າ ມີທະຫານຝະລັ່ງໂດດຈ້ອງລົງ ກໍ້ຄອມພໍດີກັບເວລາທີ່ກຳລັງ ດຳເນີນສະໄໝປະຊຸມສາມັນ ໂດຍການເປັນປະທານຂອງປະທານໂຮ່ຈິມິນ. ເພິ່ນຮັບຟັງ ລາຍງານຂອງຜູ້ຕິດຕໍ່; ຈາກນັ້ນຈຶ່ງເວົ້ານຳໝູ່ຄົນຢ່າງໜຸ່ມໜ່ຽງວ່າ:

"ໄວຫລືຊ້າ ສິ່ງດັ່ງກ່າວກໍ່ຕ້ອງເກີດຂຶ້ນ ຂໍໃຫ້ພວກສະຫາຍສືບຕໍ່ເຮັດວຽກ".

ແລ້ວເພິ່ນກໍ່ຂຽນຄຳຮຽກຮ້ອງໃນເວລານັ້ນໂລດເພື່ອສົ່ງເຖິງທະຫານ, ກອງຫລອນ ແລະ ເພື່ອນຮ່ວມຊາດຫວຽດບັກ ຢູ່ແຖວການຕໍ່ສູ້ເພື່ອເອກະລາດແຫ່ງຊາດ.

ຄະນະປະຈຳຄະນະກຳມະການບໍລິຫານງານສູນກາງພັກຕົກລົງຍົກຍ້າຍ ສຳນັກງານລັດຖະບານ ໄປຍັງທີ່ຫ່າງໄກ ແລະ ສອກຫລີກກວ່າໃນທັນທີໂລດ. ຍາມກາງຄືນຟ້າມືດປານກຳຕາ, ຝົນຕົກລົງມາ ປານເທນ້ຳເທທ່າ, ປະທານໂຮ່ຈິມິນ ພ້ອມດ້ວຍຄະນະແປດຄົນອອກເດີນທາງ, ບ່າກໍ່ແບກ, ທັງຕີນກໍ້ກ້າວໄປຕາມເສັ້ນທາງອັນຫຼູລະກັນດານ.

ຈາກນັ້ນມາສອງວັນ ເພີ່ນພ້ອມດ້ວຍຄະນະເຈົ້າມາຮອດຈຸດທີ່ກຳນົດໄວ້. ອີກບໍ່ດົນກໍໄດ້ຮັບຂ່າວຄາວກ່ຽວກັບໄຊຊະນະຄັ້ງທຳອິດຂອງກອງທັບປົດປ່ອຍ ຢູ່ທີ່ເຂດສະຫມໍລະພູມ. ພ້ອມດຽວກັນກັບຂ່າວມ່ວນຊື່ນດັ່ງກ່າວ, ພວກເຂົາເຈົ້າຍັງໄດ້ຮູ້ວ່າ ຫລັງຈາກທີ່ໂຮ່ຈິມິນພ້ອມດ້ວຍຄະນະເດີນທາງອອກຈາກສຳນັກງານລັດຖະບານ ພຽງບໍ່ເທົ່າໃດຊົ່ວໂມງເທົ່ານັ້ນກໍ່ມີທະຫານຝະລັ່ງຈຳນວນຫລາຍໂດດຈ້ອງລົງບ່ອນນັ້ນ.

ກອງບັນຊາການຝະລັ່ງຫວັງວ່າ ຈະບຸກໂຈມຕີໄດ້ຢ່າງກະທັນຫັນ, ພວກເຂົາຄາດວ່າຈະບຸກໂຈມຕີກຳລັງຕໍ່ຕ້ານໄດ້ ໂດຍບໍ່ໃຫ້ຕັ້ງຕົວໄດ້. ແຕ່ກຳລັງທະຫານ ຫວຽດນາມ ໄດ້ຕ່າວໂຈມຕີຢ່າງວ່ອງໄວ ແລະ ຟາດຟັນສັດຕູຢ່າງຫນັກຫນ່ວງສອງສາມເທື່ອ. ພວກລ່າເມືອງຂຶ້ນຝະລັ່ງ ພົບກັບຄວາມປະລາໄຊຢ່າງຫນັກຫນ່ວງ ຢູ່ໃນບັ້ນຮົບແຄມແມ່ນ້ຳໂລ ຄັ້ງວັນທີ ໒໔ ເດືອນຕຸລາ ແລະ ວັນທີ ໑໐ ເດືອນພະຈິກ.

ທ້າຍປີ ໑໙໔໗, ເນື່ອງຈາກຄວາມເສັຍຫາຍຢ່າງຫນັກຫນ່ວງ, ກອງທະຫານ-ຝະລັ່ງຈຳຕ້ອງປະຖິ້ມຫລາຍເຂດຢູ່ຫວຽດບັກ ແລະ ຖອຍລົງໄປກ້ຳ ຮ່າໂນ້ຍ.

ການບຸກໂຈມຕີຫວຽດບັກຂອງສັດຕູ ທີ່ປະລາໄຊນັ້ນ ຢັ້ງຢືນໃຫ້ເຫັນວ່າແຜນການ "ສົງຄາມສາຍຟ້າແລບ" ຂອງພວກລ່າເມືອງຂຶ້ນຝະລັ່ງພັງທະລາຍລົງ. ໄຊຊະນະໃຫຍ່ທຳອິດຂອງກຳລັງຕໍ່ຕ້ານ ຊີ້ໃຫ້ເຫັນວ່າ ກຳລັງປະກອບອາວຸດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ມີຄວາມສາມາດຕີຕ້ານທຸກການບຸກໂຈມຕີຂອງສັດຕູ ດ້ວຍວິທີນຳໃຊ້ກອງທະຫານຫລວງກໍ່ຄືການເຄື່ອນໄຫວຂອງກອງຫລອນຢູ່ເຂດແນວຫລັງ. ຫລັງຈາກການປະລາໄຊຢູ່ຫວຽດບັກແລ້ວ ກອງບັນຊາການຝະລັ່ງບໍ່ກ້າບຸກໂຈມຕີ ຖານທີ່ຫມັ້ນສູນກາງຂອງການຕໍ່ຕ້ານຢ່າງກະຈັ້ນກະຈໍ້ອີກ. ໃນຕົວຈິງແລ້ວ ກອງທະຫານຝະລັ່ງ ຈຳເປັນຕ້ອງປ່ຽນໄປໃຊ້ຍຸດທະສາດປ້ອງກັນຕົວ, ຊຶ່ງເປັນວິທີດຳເນີນສົງຄາມ ທີ່ໄຮ້ປະໂຫຍດສຳລັບທະຫານຮຸກຮານ, ແຕ່ກອງທັບຫວຽດນາມໄດ້ບັງຄັບໃຫ້ພວກເຂົາຕ້ອງເຮັດຄືແນວນັ້ນ.

ໄຊຊະນະຄັ້ງທຳອິດຂອງບັນດາຜູ້ຮັກຊາດຫວຽດນາມ ໃນສົງຄາມຕໍ່ຕ້ານນັ້ນ ແມ່ນຕິດພັນຢ່າງບໍ່ຂາດສາຍກັບນ້ຳໃຈສາມັກຄີສາກົນທີ່ນັບມື້ນັບເພີ່ມຂຶ້ນ, ກັບການເປັນໃຈສະຫນັບສະຫນູນຂອງສະຫະພາບໂຊວຽດ ເພື່ອນມິດຕົ້ນຕໍຂອງຫວຽດນາມ.

ການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນອິນດູຈີນ ຍາມໃດກໍຍາດເອົາ ນ້ຳຈິດນ້ຳໃຈ ແລະ ການສະຫນັບສະຫນູນຢ່າງສຸດໃຈຈາກປະຊາຊົນໂຊວຽດ. ນັບແຕ່ຊຸມປີ ໒໐–໓໐ ນັ້ນ, ຈາກເວທີກອງປະຊຸມໃຫຍ່ພັກຂອງຕົນ ຊາວກອມມູນິດໂຊວຽດ ໄດ້ສະແດງນ້ຳໃຈສາມັກຄີກັບຂະບວນການປະຕິວັດຢູ່ປະເທດເມືອງຂຶ້ນຢ່າງເປີດເຜີຍ, ໃນນັ້ນ ມີປະເທດອິນດູຈີນ, ອັນນັ້ນເຮັດໃຫ້ມະຫາອຳນາດເມືອງຂຶ້ນຄຽດຄົນທີ່ສຸດ. ໃນຊຸມປີແຫ່ງສົງຄາມໂລກຄັ້ງທີສອງ, ໃນເວລາແຫ່ງການຕັດສິນຊາຕາກຳຂອງໂລກ, ເຖິງວ່າຢູ່ຫ່າງ ຈາກອິນດູຈີນໄກທີ່ສຸດກໍຕາມ ແຕ່ສະຫະພາບໂຊວຽດກໍພະຍາຍາມກະຕຸກຊຸກຍູ້ ບາດກ້າວເດີນຂອງເຫດການຢູ່ໃນຂົງເຂດນີ້ຢ່າງຕັ້ງຫນ້າ ເພື່ອຊ່ວຍເຫລືອກຳລັງປົດປ່ອຍຊາດ. ຕົວຢ່າງນັບແຕ່ປີ ໑໙໔໓ ຢູ່ກອງປະຊຸມປະເທດພັນທະມິດທີ່ ເຕເຮລານ, ອີ.ວ.ສະຕາລິນ ໄດ້ປະກາດກັບຜູ້ແທນອັງກິດ ແລະ ອາເມລິກາວ່າ ເພິ່ນ "ສຳນຶກບໍ່ອອກວ່າ ເປັນຫຍັງປະເທດພັນທະມິດທີ່ໄດ້ເສຍເລືອດເນື້ອເພື່ອປົດປ່ອຍອິນດູຈີນ ແຕ່ວ່າຫລັງຈາກນັ້ນ ຈຶ່ງປ່ອຍໃຫ້ປະເທດຝະລັ່ງບຸກຍຶດອິນດູຈີນ ເພື່ອຟື້ນຟູລະບອບລ່າເມືອງຂຶ້ນຢູ່ແຫ່ງນັ້ນ".

ປີ ໑໙໔໕, ເວລາທີ່ພວກຈັກກະພັດໃຊ້ເລຫລ່ຽມຢ່າງມີຊັ້ນເຊີງ ຕໍ່ມະຕິ ຂອງກອງປະຊຸມປົດສະດາມ ໂດຍມອບໃຫ້ພວກຈຽງໄຄເຊັກປົດອາວຸດກອງທັບຍີ່ປຸ່ນຢູ່ອິນດູຈີນໃນເບື້ອງຕົ້ນ ຈາກນັ້ນກໍ່ມອບໃຫ້ຝະລັ່ງ, ສະຫະພາບໂຊວຽດໄດ້ຄັດຄ້ານການກະທຳດັ່ງກ່າວຢ່າງເດັດດ່ຽວ ໂດຍເນັ້ນຫນັກວ່າ ປະຊາຊົນຫວຽດນາມກຳລັງຕໍ່ສູ້ເພື່ອເອກະລາດ ແລະ ອິດສະຫລະພາບຂອງເຂົາເຈົ້າ, ສິດດັ່ງກ່າວນັ້ນໄດ້ຮັບການຮັບຮູ້ຢູ່ກອງປະຊຸມເຕເຮລານ, ຢານຕາ, ຊານຟະຣານຊິດສະໂກ. ສະຫະພາບໂຊວຽດ ຍັງເນັ້ນອີກວ່າກຳລັງທະຫານຍຶດຄອງທີ່ຖືກສົ່ງເຂົ້າອິນດູຈີນ ເປັນເວລາຊົ່ວຄາວ ຕ້ອງບໍ່ໄດ້ແຊກແຊງເຂົ້າວຽກງານພາຍໃນຂອງປະເທດໃນຂົງເຂດນີ້.

ສະຫະພາບໂຊວຽດກ່າວປະນາມຢ່າງຮຸນແຮງ ຕໍ່ສົງຄາມອັນເປື້ອນເປິຂອງພວກລ່າເມືອງຂຶ້ນຝະລັ່ງ ຕ້ານປະຊາຊົນຫວຽດນາມ. ໃນເດືອນມັງກອນ ປີ ໑໙໕໐, ໂດຍຕອບສະຫນອງຄຳຖະແຫລງ ຂອງປະທານໂຮ່ຈີມິນ ກ່ຽວກັບເລື່ອງທີ່ວ່າ ສາທາລະນະ-ລັດ ປະຊາທິປະໄຕ ຫວຽດນາມ ຕຽມພ້ອມສ້າງສາຍພົວພັນການທູດກັບທຸກປະເທດ ບົນພື້ນຖານແຫ່ງຄວາມສະເຫມີພາບ ແລະ ຄວາມເຄົາລົບຊຶ່ງກັນ ແລະ ກັນນັ້ນ, ສະຫະພາບໂຊວຽດກໍຄືບັນດາປະເທດສັງຄົມນິຍົມອື່ນໆ ໄດ້ປະກາດຮັບຮູ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ທາງການທູດ.

ການສ້າງຕັ້ງສາຍພົວພັນທາງການທູດລະຫວ່າງສະຫະພາບໂຊວຽດ ກັບຫວຽດນາມ, ນອກຈາກຈະມີຜົນສະທ້ອນທາງດ້ານການເມືອງ ແລະ ຈິດໃຈອັນໃຫຍ່ຫຼວງແລ້ວ ຍັງມີຄວາມໝາຍຕົວຈິງອັນຍິ່ງໃຫຍ່ສຳລັບຜູ້ຮັກຊາດຫວຽດນາມອີກດ້ວຍ, ປະກົດການດັ່ງກ່າວ ເຊີດຊູອິດທິພົນ ຂອງລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ແລະ ເພີ່ມທະວີຄວາມໂດດດ່ຽວໃຫ້ "ລັດຫວຽດນາມ" ຂອງ ບາວດາຍ "ລັດ" ນີ້ອີງໃສ່ການສະໜັບສະໜູນຂອງພວກລ່າເມືອງຂຶ້ນ ແລະ ຜິປອງຢາກເປັນຜູ້ຕາງໜ້າ ໃຫ້ແກ່ປະຊາຊົນຫວຽດນາມ. ໃນເວລານັ້ນ ໜັງສືພິມ "ປຣາວະດາ" ຂຽນວ່າ "ລັດຖະບານຫຸ່ນ ບາວດາຍ ບໍ່ມີຄວາມໝາຍ ຍ້ອນວ່າມັນບໍ່ເປັນຕົວແທນໃຫ້ແກ່ຜູ້ໃດ ນອກຈາກກຸ່ມນ້ອຍໆຂອງພວກປະຕິການ".

ປະທານໂຮ່ຈີມິນ ແລະ ເພື່ອນຮ່ວມຮົບຂອງເພິ່ນ ມີຄວາມຮູ້ສຶກເບີກບານຢ່າງບໍ່ມີຂອບເຂດໃນນີ້ສ້າງຕັ້ງສາຍພົວພັນໂດຍກົງກັບສະຫະພາບໂຊວຽດ. ໃນທີ່ສຸດ ວົງປິດລ້ອມຂອງປະເທດຈັກກະພັດກໍ່ໄດ້ຖືກບຸກທະລຸໝົດ. ໂດຍຕົກຢູ່ໃນສະພາບປິດລ້ອມ ອັນໂຫດຮ້າຍດັ່ງກ່າວ ສາທາລະນະລັດໜຸ່ມນ້ອຍ ຕ້ອງໄດ້ສູ້ຮົບຕະຫລອດ ໕ ປີ ເພື່ອການຄົງຕົວຂອງຕົນ. ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ກາຍເປັນພາກສ່ວນປະກອບໜຶ່ງ ຂອງຝ່າຍປະຊາທິປະໄຕໂລກ, ໄດ້ສ້າງຕັ້ງສາຍພົວພັນຖານອ້າຍນ້ອງກັບສະຫະພາບໂຊວຽດ ອູ່ຂອງການປະຕິວັດໂລກ, ເປັນປະເທດທີ່ປະທານໂຮ່ຈີມິນ ແລະ ຊາວກອມມູນິດຫວຽດນາມອື່ນໆ ໄດ້ພັກອາໄສ ແລະເຄື່ອນໄຫວປະຕິວັດເປັນຫລາຍໆປີ. ໂດຍໃຫ້ການຕີລາຄາ ຕໍ່ການສ້າງຕັ້ງສາຍພົວພັນທາງການທູດລະຫວ່າງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ກັບບັນດາປະເທດສັງຄົມນິຍົມນັ້ນ ປະທານໂຮ່ຈີມິນ ຂຽນວ່າ: "ສອງສາມປີແຫ່ງສົງຄາມຕໍ່ຕ້ານ ໄດ້ນຳເອົາໄຊຊະນະອັນສະຫງ່າງາມມາໃຫ້ປະຫວັດສາດຂອງປະເທດຊາດ. ສອງປະເທດໃຫຍ່ໃນໂລກ ຄືສະຫະພາບໂຊວຽດ ແລະ ຈີນ ກໍຄືປະເທດ ປະຊາທິປະໄຕ ປະຊາຊົນອື່ນໆ ລ້ວນແຕ່ໄດ້ຮັບຮູ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ວ່າເປັນປະເທດທີ່ສະເໝີພາບກັນໃນຄອບຄົວໃຫຍ່ ຂອງຝ່າຍປະຊາທິປະໄຕໂລກ. ແນ່ນອນວ່າ ໄຊຊະນະດ້ານການເມືອງດັ່ງກ່າວ ແມ່ນສິ່ງ ຄ້ຳປະກັນໃຫ້ແກ່ໄຊຊະນະດ້ານການທະຫານໃນອະນາຄົດ".

໔

ຄວາມເວົ້າຂອງປະທານໂຮ່ຈີ່ມິນ ທີ່ກ່າວມາຂ້າງເທິງນັ້ນ ແມ່ນຄຳພະຍາກອນທີ່ປະກົດເປັນຈິງ. ໃນເດືອນກັນຍາ ປີດຽວກັນ ຄະນະປະຈຳຄະນະກຳມະການ ບໍລິຫານງານສູນກາງພັກໄດ້ຜ່ານມະຕິເປີດບັ້ນຮົບໃຫຍ່ອັ້ນຢູ່ເຂດຊາຍແດນຫວຽດນາມ–ຈີນ ເພື່ອປົດເຂຍພວກຣຸກຮານຝະລັ່ງທີ່ຍຶດຄອງເຂດນີ້. ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ບໍ່ພຽງແຕ່ຕ້ອງການການສະໜັບສະໜູນດ້ານການເມືອງເທົ່ານັ້ນ ແຕ່ຫາກ ຍັງຕ້ອງການການຊ່ວຍເຫລືອດ້ານວັດຖຸຈາກສະຫະພາບໂຊວຽດ ແລະ ຈາກປະເທດທີ່ມິລະບອບປະຊາທິປະໄຕປະຊາຊົນອື່ນໆນຳອີກ.

ເວລາເລີ່ມກະກຽມບັ້ນຮົບຢູ່ນັ້ນ ປະທານໂຮ່ຈີ່ມິນ ຢາກໄປກວດກາດ້ວຍຕົນເອງສະພາບການກຽມພ້ອມສູ້ຮົບຂອງທະຫານຫວຽດນາມ ແລະ ເຂົ້າຮ່ວມນຳພາ ການບຸກໂຈມຕີໂດຍກົງ. ເຂດສູ້ຮົບນີ້ ຕັ້ງຫ່າງຈາກສຳນັກງານລັດຖະບານຢູ່ທີ່ຫວຽດບັກ ໄກສົມຄວນ.

ເຖິງຢ່າງໃດກໍຕາມ ໂຮ່ຈີ່ມິນ ກໍ່ອອກເດີນທາງໄກ ແລະ ຫຍຸ້ງຍາກ ຜ່ານພູສູງ ແລະ ປ່າເລິກດົງດິບ ຢ່າງບໍ່ລັ້ງເລໃຈ, ເຖິງວ່າເພິ່ນມີອາຍຸຫົກສິບປາຍປີແລ້ວ. ພ້ອມດ້ວຍໜ່ວຍປ້ອງກັນ, ແພດ ແລະ ຜູ້ຊ່ວຍວຽກສອງຄົນ ປະທານໂຮ່ຍ່າງແຕ່ສຳນັກງານທີ່ຕັ້ງຢູ່ແຂວງ ຕວຽນກວາງ ຂຶ້ນເມືອຫາຊາຍແດນຫວຽດນາມ–ຈີນ, ແລ້ວອອກຈາກຊາຍແດນຫວຽດນາມ–ຈີນ ລ້ຽວໄປເມືອງ ກາວບັງ ແລະ ຈາກ ກາວບັງ ກັບຄືນມາຕວຽນກວາງ. ເສັ້ນທາງອັນຍາວໄກ ແລະ ລຳບາກກາກກຳດັ່ງກ່າວ ມີໄລຍະ ໔໐໐ ກິໂລແມັດກວ່າ.

ເຮືອບິນຝະລັ່ງບິນເຈີດຢູ່ບົນທ້ອງຟ້າເຂດກອງຫລອນທັງວັນທັງຄືນ. ເພື່ອຫລີກເວັ້ນບໍ່ໃຫ້ສັດຕູເຫັນຕົວ ຄະນະມັກເດີນທາງໄປຍາມກາງຄືນ. ຖ້າເສັ້ນທາງຜ່ານປ່າດິບຍາກໃນການໄປ ຄະນະເດີນທາງກໍນອນພັກຜ່ອນໃນຕອນກາງຄືນ ແລ້ວກໍຟ້າວຟັ່ງ ອອກເດີນທາງໃນເວລາຮຸ່ງອະລຸນ; ຕົກມາຮອດຕອນທ່ຽງ ເຂົາເຈົ້າພັກຜ່ອນ ຢູ່ແຄມຫ້ວຍກ້ອງຮົ່ມໄມ້ເຢັນສະບາຍ ຫລື ຢູ່ຕີນພູ. ເຂົາເຈົ້າກິນເຂົ້າກັບ "ກະປ໋ອງຫວຽດມິນ", ຈາກນັ້ນກໍລົ້ມຕົວນອນຫລັບໄຫລ ຢູ່ເທິງດິນຫລືເທິງແຜ່ນຫີນທີ່ປົກຫຸ້ມດ້ວຍໄຄຫີນ.

ເພື່ອຫລີກເວັ້ນຈາກການປະເຊີນໜ້າກັບສັດຕູໂດຍບໍ່ຈຳເປັນ, ຄະນະເດີນທາງພະຍາຍາມຍ່າງເວັ້ນບ້ານໃຫຍ່. ຖ້າຢາກພັກແຮມຄືນພວກເຂົາເຈົ້າກໍພາກັນນອນ ຢູ່ໃນ

ວັດ ຫລືນອນຢູ່ໃນເຮືອນລວມໃດໜຶ່ງຕັ້ງຢູ່ໃກ້ບ້ານ. ບາງຄັ້ງ ຢູ່ຕາມເສັ້ນທາງ ໃນປ່າ ຄະນະເດີນທາງໄດ້ພົບຕູບໄມ້ໄຜ່ປະຫວ່າງເປົ່າ ຊຶ່ງເປັນແບບຮ້ານກິນດື່ມທີ່ບໍ່ມີເຈົ້າຂອງ. ຕອນກາງເວັນຊາວບ້ານເຂດພູດອຍ ໄດ້ນຳເອົາໝາກກ້ວຍ ອ້ອຍ ມັນຕົ້ນ ມັນຝະລັ່ງ ມາໄວ້ຢູ່ບ່ອນນີ້ ແລະ ເອົາສິ່ງຂອງດັ່ງກ່າວຂຶ້ນຫ້ອຍໄວ້ເທິງຝາເຮືອນ. ຖ້າຄົນເດີນທາງ ຫາກແວ່ເຂົ້າມາທີ່ນັ້ນ ຢາກກິນເທົ່າໃດກໍສຸດແລ້ວແຕ່ໃຈມັກ, ເມື່ອກິນແລ້ວຮຽບຮ້ອຍ ກໍ ປ່ອນເງິນລົງໃນກະບັ້ງໄມ້ເຮ້ຍ ທີ່ວາງໄວ້ຢູ່ປະຕູເຂົ້າອອກ. ເຈົ້າຂອງຮ້ານ ບາງຄັ້ງ ຄາວກໍ່ເຂົ້າປ່າແວ່ຜ່ານມາແຫ່ງນີ້ ນຳເອົາເຄື່ອງກິນມາແລກເອົາເງິນ ແລ້ວກໍ່ກັບຄືນ ເຮືອນ.

ຜູ້ໃດບໍ່ລຶ້ງຍ່າງທາງໄກ ກໍຈະອ່ອນກຳລັງໄວທີ່ສຸດ. ມີເທື່ອໜຶ່ງເວລາ ພັກເຊົາ ໂຮ່ຈີມິນ ເວົ້ານຳພວກເຂົາເຈົ້າວ່າ:

"ພວກເຮົາເມື່ອຍຫລາຍກໍຍ້ອນພວກເຮົາຍ່າງບໍ່ປາກ. ບັດນີ້ພວກຫລານ ຍ່າງ ໃກ້ໆກັບລຸງເນີ, ລຸງຈະເລົ່າກາບກອນໂບຮານໃຫ້ຟັງ".

ການຖືກບາດຕີນໄວຂຶ້ນປັບໆຄືກັນກັບລືມຄວາມອິດເມື່ອຍ, ທາງອັນຍາວໄກຄືຈັ່ງ ວ່າ ສັ້ນເຂົ້າຈຸກໄຊ້.

ເມື່ອຄະນະເດີນທາງມາຮອດທາງເລກ ໔ ຊຶ່ງເນັ່ງຕາມແລວຊາຍແດນ, ລົດ "ຈີບ" ຄັນໜຶ່ງ ຊຶ່ງທາງຄະນະບັນຊາສະໜາມຮົບ ສົ່ງມາຮັບເອົາເຂົາເຈົ້າ ໄດ້ມາ ຮອດຈຸດແຫ່ງນີ້ຢູ່ກ່ອນແລ້ວ. ທັງອິດເມື່ອຍ ທັງເພຍແຮງ, ຕີນຕົວມີແຕ່ຂີ້ຝຸ່ນ ຕາມທາງ ຍ່າງ, ຄະນະເດີນທາງຫາຍໃຈໂລ່ງບາດຄ່ອຍໆ. ໃນທີ່ສຸດກໍຈະພັກຜ່ອນໄດ້ແລ້ວ.

ແຕ່ວ່າ ປະທານໂຮ່ຈີມິນ ຕົກລົງໃຈອີກແບບໜຶ່ງ:

"ເວລານີ້ ພາຫະນະຂົນສົ່ງທັງໝົດ ຕ້ອງເອົາໄວ້ສຳລັບຂົນຍ້າຍອາວຸດ, ລູກ ກະສຸນ ແລະ ສະບຽງອາຫານ ໃຫ້ແກ່ບັ້ນຮົບທີ່ຈະມາເຖິງ. ລຸງບໍ່ຕ້ອງການລົດດອກ , ລຸງຍັງມີເຫື່ອແຮງຍ່າງໄດ້ຢູ່".

ຫົກໂມງເຊົ້າຂອງວັນທີ ໑໖ ເດືອນກັນຍາ ປີ ໑໙໕໐, ທີ່ດົງດັງ ເຊິ່ງຫ່າງ ຈາກຊາຍແດນຫວຽດນາມ-ຈີນ ບໍ່ໄກປານໃດ ບັ້ນສູ້ຮົບໄດ້ເກີດຂຶ້ນ. ບັ້ນຮົບຄັ້ງນີ້ ກາຍ ເປັນບາດລ້ຽວຂອງສົງຄາມຕໍ່ຕ້ານ. ປະທານໂຮ່ຈີມິນຮ່ວມກັບຄະນະບັນຊາການ ປະຈຳ ຢູ່ໃນຈຸດສັງເກດການທີ່ຕັ້ງຢູ່ຈອມພູ. ຈາກບ່ອນນີ້ ພວກເຂົາເຈົ້າມອງເຫັນຄ້າຍຂອງຝະ ລັ່ງ ທີ່ຕັ້ງອ້ອມເມືອງດົງດັງ.

ບັ້ນຮົບອັນດຸເດືອດດຳເນີນຕິດຕໍ່ກັນຕະຫລອດ ໔໐ ວັນ ແລະ ໔໐ ຄືນ. ຜົນສຸດທ້າຍ ກຳລັງທະຫານຝະລັ່ງທີ່ຕັ້ງຢູ່ເຂດນີ້ຖືກຕີແຕກ. ທະຫານກອງຫນູນໃຫຍ່ຫນຶ່ງກອງທີ່ສົ່ງໄປຊ່ວຍເຫລືອກຳລັງທະຫານຝະລັ່ງນັ້ນ ຕົກຢູ່ໃນວົງປິດລ້ອມ. ໃນເວລານັ້ນ ມີຜູ້ບັນຊາການຈຳນວນຫນຶ່ງ ທີ່ສະເຫນີວ່າ ກ່ອນທີ່ຈະບຸກຕີຄັ້ງຕັດສິນໃສ່ພວກສັດຕູທີ່ຖືກປິດລ້ອມຢູ່ນັ້ນ, ຄວນປະປ່ອຍໃຫ້ທະຫານຫວຽດນາມພັກຜ່ອນຈັກມື້ຫນຶ່ງເອົາແຮງ. ເວລາລາຍງານຂຶ້ນຫາປະທານໂຮ່ຈີ້ມິນ ເພິ່ນເວົ້າວ່າ:

"ແມ່ນແລ້ວ ທະຫານເຮົາອິດເມື່ອຍ ແຕ່ວ່າສັດຕູກໍເມື່ອຍຫລາຍກວ່າຫ້າເທົ່າ , ເຈັດເທົ່າ. ເວລານີ້ແມ່ນໂອກາດດີທີ່ສຸດເພື່ອດັບສູນສັດຕູ, ບໍ່ແມ່ນຫວະ ?"

ເພິ່ນຮີບຮ້ອນລົງມືພິມຈົດຫມາຍເຖິງຜູ້ບັນຊາການ ແລະ ນັກຮົບ ທີ່ເຂົ້າຮ່ວມໃນບັ້ນຮົບໃນທັນໃດໂລດ ໂດຍມີເນື້ອໃນວ່າ: "ນັກຮົບທີ່ຮັກແພງ! ນັບແຕ່ມື້ຕ້ານ ຈີນມາຮອດວັນນີ້ ຍັງບໍ່ທັນມີການສູ້ຮົບຄັ້ງໃດ ຄືກັນກັບຄັ້ງນີ້ ເມື່ອທະຫານຂອງພວກເຮົາທຳການສູ້ຮົບຢ່າງດຸເດືອດຂ້ຽວຂາດຕິດຕໍ່ກັນຫລາຍວັນ. ນັ້ນຄືການທົດສອບຢ່າງຫນັກຫນ່ວງສຳລັບຝ່າຍເຮົາ. ໂດຍບໍ່ງ້ວງຽງຕໍ່ຄວາມອິດເມື່ອຍ, ຄວາມອຶດຫິວ, ຄວາມຫນາວພວກຫລານໄດ້ຕີທັບມ້າງກອງທະຫານທີ່ຍອດຢ້ຽມຂອງສັດຕູ ແລະ ໄດ້ສະແດງຕົວເປັນວິລະຊົນອັນແທ້ຈິງ. ພວກຫລານຈົ່ງພະຍາຍາມດັບສູນກອງທະຫານຂອງພວກສັດຕູ ທີ່ຖືກປິດລ້ອມໃຫ້ຫມົດກ້ຽງ...ລຸງຂໍກອດຮັດພວກຫລານຫມົດທຸກຄົນ. ຈົ່ງບຸກຫນ້າໄປສູ່ ໄຊຊະນະ !"

ຄວາມຈິງແລ້ວ ນັກຮົບຫວຽດນາມໄດ້ເຮັດຫລ້ອມວຽກຫນຶ່ງຄືຈົ່ງວ່າ ຈະເຮັດບໍ່ໄດ້. ຕອນກາງຄືນຂອງວັນນັ້ນ ເຂົາເຈົ້າອອກຕະລຸມບອນທີ່ຕັ້ງຂອງທະຫານສັດຕູ ທີ່ຖືກປິດລ້ອມໄວ້ ແລະ ຮອດ ໕ ໂມງເຊົ້າ ບັ້ນຮົບທີ່ແກ່ຍາວມາຫລາຍມື້ຢູ່ຊາຍແດນ ຫວຽດນາມ–ຈີນ ໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງພວກເຂົາເຈົ້າ.

ເປັນຄັ້ງທຳອິດ ພາຍຫລັງ ໕ ປີແຫ່ງສົງຄາມ, ສະເພາະແຕ່ຈຳນວນທະຫານຝະລັ່ງ ທີ່ຖືກຈັບເປັນຊະເລີຍເສິກມີເຖິງ ໘.໐໐໐ ຄົນ. ພວກເຂົາຖືກຄຸມຂັງຢູ່ຕາມ ຫ້ອງຂັງທີ່ເຮັດດ້ວຍໄມ້ໄຜ່ຂອງກອງທັບຫວຽດນາມ. ປະທານໂຮ່ຈີ້ມິນລົງໄປຢ້ຽມຢາມ ຫນຶ່ງໃນຈຳນວນຄ້າຍຄຸມຂັງດັ່ງກ່າວ ແລະ ໂອ້ລົມກັບຊະເລີຍເສິກຈຳນວນຫນຶ່ງ. ໃນຈຳນວນຊະເລີຍເສິກດັ່ງກ່າວມີທັງທະຫານຮັບຈ້າງຜິວຂາວ, ມີທັງຜິວດຳ ທີ່ເກນມາຈາກເມືອງຂຶ້ນຝະລັ່ງ ຢູ່ທະວີບອາຝະລິກາ ແລະ ມີທະຫານຂອງກອງທັບຫຸ່ນ ບາວດາຍ. ປະທານ

ໂຣ່ຈີມິນ ຫົ່ມເສື້ອສີດຳຄືກັນກັບຊາວນາ ໃສ່ໝວກສະໂນ ເບິ່ງແລ້ວບໍ່ຕ່າງຫຍັງ ກັບຄົນທ້ອງຖິ່ນ. ຫົວໜ້າຄ້າຍເວົ້າກັບຊະເລີຍເສິກວ່າ ມີພໍ່ເຖົ້າທ້ອງຖິ່ນຄົນໜຶ່ງ ຢາກໂອ້ລົມນຳເອົາເຈົ້າ. ການໂອ້ລົມກັນກັບຮ້ອຍເອກແພດຝະລັ່ງ ເປັນເລື່ອງໜ້າສົນໃຈ ສຳລັບໂຣ່ຈີມິນ. ເບື້ອງຕົ້ນ ຮ້ອຍເອກສະແດງຄວາມບໍ່ສົນໃຈຕໍ່ແຂກທີ່ມາຢ້ຽມຢາມ. ເຂົາພຽງແຕ່ແປກປະຫລາດທີ່ເຫັນພໍ່ເຖົ້າບໍລຶງໜ້າຄົນນີ້ ຊຳພັດເວົ້າພາສາຝະລັ່ງ ໄດ້ຢ່າງຄ່ອງແຄ້ວທີ່ສຸດ. ປະທານໂຣ່ຈີມິນ ບອກໃຫ້ເຂົາຮູ້ວ່າ ປະຊາຊົນຫວຽດນາມ ບໍ່ຕ້ອງການສົງຄາມ, ໄດ້ ໕ ປີແລ້ວທີ່ປະຊາຊົນຫວຽດນາມ ແລະ ປະຊາຊົນຝະລັ່ງ ໄດ້ເສຍເລືອດເນື້ອຢ່າງໄຮ້ປະໂຫຍດ. ສົງຄາມດັ່ງກ່າວແມ່ນເກີດມາຈາກນ້ຳມືຂອງນາຍທຶນ ຝະລັ່ງພຽງຢິບມືດຽວ, ພວກນີ້ມີຊີວິດຢູ່ບົນຄວາມທຸກຍາກຂອງຊາວຜູ້ອອກແຮງງານເປັນລ້ານໆຄົນ. ຄຳເວົ້າດັ່ງກ່າວເຮັດໃຫ້ຮ້ອຍເອກຝະລັ່ງມີແວວຕາທີ່ສະແດງຄວາມເຫັນໃຈ ແລະເຂົາເອງກໍສົນໃຈຟັງພໍ່ເຖົ້າເວົ້າຍິ່ງຂຶ້ນກວ່າເກົ່າ. ເມື່ອເຫັນຮ້ອຍເອກຝະລັ່ງສັ່ນທົດ ໆ ຂຶ້ນ ຍ້ອນໜາວຫລາຍ ໂຣ່ຈີມິນ ຖອດເສື້ອຊັ້ນນອກຂອງຕົນອອກ ແລ້ວເອົາໄປປົກທີ່ບ່າຂອງເຂົາ. ມາຮອດຕອນນີ້, ຮ້ອຍເອກຝະລັ່ງບໍ່ສາມາດສະກົດຈິດໃຈຕົນໄດ້ອີກແລ້ວ , ເຂົາຮ້ອງໄຫ້ສະອຶກສະອື້ນ.

ຕົກມາຮອດທ້າຍເດືອນຕຸລາ ປີ ໑໙໕໐, ຢູ່ໃນເຂດພາກເໜືອທີ່ຕິດ ກັບຊາຍແດນຫວຽດນາມ-ຈີນ ທັງໝົດບໍ່ມີຮອຍຕີນທະຫານສັດຕູອີກແລ້ວ. ຕົວເມືອງໃຫຍ່ ເຊັ່ນກາວບັ່ງ ລາງເຊີນ ລາວກາຍ ທາຍງວຽນ ຮວາບິງ ພັດຕົກຢູ່ໃນກຳມືອຳນາດປົກຄອງປະຊາຊົນ. ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ມີຊາຍແດນທີ່ຕິດກັບ ບັນດາປະເທດໃນຄ້າຍສັງຄົມນິຍົມ. ອີກປະການໜຶ່ງ ຄຽງຄູ່ກັບການປະລາໄຊ ດ້ານການທະຫານຂອງພວກລ່າເມືອງຂຶ້ນ, ແຜນການຂອງພວກເຂົາທີ່ຢາກສ້າງຕັ້ງລັດ "ປົກຄອງຕົນເອງ" ໝູ່ ຢູ່ເຂດພູດອຍຂອງຫວຽດນາມພາກເໜືອ ລ້ວນແຕ່ຖືກທຳລາຍ ມ້າງເພ້ກຽງ.

ໃນຊຸມປີແຫ່ງສົງຄາມຕໍ່ຕ້ານ ພັກຂອງຊາວກອມມູນິດຫວຽດນາມເຊິ່ງເຄື່ອນໄຫວໃນນາມແນວໂຮມຫວຽດມິນນັ້ນ ໄດ້ກາຍມາເປັນອົງການຈັດຕັ້ງມະຫາຊົນທີ່ເຂັ້ມແຂງອັນໜຶ່ງ, ເປັນກຳລັງໜຶ່ງທີ່ພາທາງ ແລະ ນຳພາໃນການຈັດຕັ້ງການຕໍ່ຕ້ານ ກັບພວກຮຸກຮານ ແລະ ກໍ່ສ້າງລັດໃໝ່. ການຂະຫຍາຍຕົວຂອງສະພາບການຮຽກຮ້ອງ ໃຫ້ຕ້ອງເພີ່ມທະວີການນຳພາຂອງພັກຫລາຍກວ່າເກົ່າ ສຳລັບໝົດທຸກດ້ານໃນຊີວິດຂອງປະເທດເພື່ອຍູ້ການຕໍ່ຕ້ານໃຫ້ໄປຮອດໄຊຊະນະສຸດທ້າຍ. ຄະນະປະຈຳຄະນະ ກຳມະການ ບໍລິຫານງານສູນກາງພັກກອມມູນິດອິນດູຈີນ ຕົກລົງຮຽກໂຮມກອງປະຊຸມໃຫຍ່ຄັ້ງທີ 2 ຂອງພັກຂຶ້ນໃນເດືອນກຸມພາ ປີ ໑໙໕໑ ຢູ່ເຂດກອງຫລອນແຫ່ງໜຶ່ງຂອງຫວຽດບັກ.

ປະທານໂຮ່ຈີມິນ ອ່ານບົດລາຍງານການເມືອງທີ່ກອງປະຊຸມໃຫຍ່, ເພິ່ນໄດ້ແຍກຢ່າງເລິກເຊິ່ງການເຄື່ອນໄຫວຂອງພັກໃນໄລຍະຫລາຍກວ່າ ໒໐ ປີນັບແຕ່ມື້ສ້າງຕັ້ງ . ເພິ່ນເນັ້ນໜັກວ່າ ການປະຕິວັດຫວຽດນາມໄດ້ຮັບໄຊຊະນະນີ້ຫາໄຊຊະນະນັ້ນ ແມ່ນເນື່ອງຈາກມີພັກນຳພາອັນເຂັ້ມແຂງ. ພະລັງແຮງທີ່ຍິ່ງໃຫຍ່ຂອງພັກ ແມ່ນຢູ່ບ່ອນວ່າພັກອີງໃສ່ລັດທິມາກ–ເລນິນ, ໄດ້ຮັບຄວາມຮັກແພງ, ເຊື່ອໝັ້ນ ແລະ ສະໜັບສະໜູນຈາກທົ່ວປວງຊົນ.

ໂຮ່ຈີມິນ ໄດ້ຕອບໂຕ້ພວກທີ່ບໍ່ມີຄວາມເຊື່ອໝັ້ນ ແລະ ມີແນວຄິດທຸກຂະທັດ, ຜູ້ທີ່ບໍ່ແນ່ໃຈວ່າ ການຕໍ່ຕ້ານຈະໄດ້ຮັບໄຊຊະນະ, ຜູ້ທີ່ເອີ້ນການຕໍ່ສູ້ຂອງປະຊາຊົນ ຫວຽດນາມ ຕ້ານພວກລ່າເມືອງຂຶ້ນວ່າ "ຕັກກະແຕນຕີເສິກກັບຊ້າງ".

ເພິ່ນເວົ້າວ່າ: "ຖ້າແມ່ນເບິ່ງພຽງແຕ່ດ້ານວັດຖຸ, ຖ້າແມ່ນເບິ່ງ ສະພາບການປະຈຸບັນ ພຽງແຕ່ຢູ່ບົນທັດສະນະອັນຄັບແຄບນັ້ນ ປະກົດການດັ່ງກ່າວເປັນຄວາມຈິງແທ້, ເພາະວ່າເພື່ອຕໍ່ຕ້ານຍົນ ແລະ ປືນໃຫຍ່ຂອງສັດຕູໃນສະໄໝໜຶ່ງ ພວກເຮົາ ຕ້ອງໃຊ້ຫອກ. ແຕ່ພັກເຮົາທີ່ມີລັດທິ ມາກ–ເລນິນ ເປັນຄືອາວຸດນັ້ນ ບໍ່ພຽງແຕ່ເບິ່ງປະຈຸບັນ , ແຕ່ຫາກຍັງເບິ່ງອະນາຄົດ. ພວກເຮົາເຊື່ອໝັ້ນຕໍ່ນ້ຳໃຈສູ້ຮົບ ແລະ ກຳລັງແຮງ ຂອງມະຫາຊົນຂອງຊາດຫວຽດນາມ. ດ້ວຍເຫດນັ້ນ ພວກເຮົາຈຶ່ງຕອບໂຕ້ຄຳເວົ້າ ຂອງຄົນຈຳພວກເຄິ່ງໆກາງໆ ແລະ ເບິ່ງແຕ່ໃນແງ່ຮ້າຍວ່າ: "ເຖິງວ່າມື້ນີ້ຕັກກະແຕນ ກັດໄດ້ແຕ່ຂາຊ້າງເທົ່ານັ້ນກໍຕາມ ແຕ່ມື້ອື່ນຊ້າງກໍຈະຖືກປາດຊີ້ນ".

ໃນຂະນະດຽວກັນ ໂຮ່ຈີມິນ ຕັກເຕືອນພັກ ແລະ ປະຊາຊົນວ່າ ບໍ່ຄວນຟ້າວຟັ່ງ

ຢ່າໄດ້ເມົາມົວນຳໄຊຊະນະຫລາຍ. ໄຊຊະນະທີ່ຍາດມາໄດ້ໃນປີ ໑໙໕໐ ຢູ່ເຂດພາກເໜືອນັ້ນ, ໄດ້ເຮັດໃຫ້ພະນັກງານພັກມີແນວຄິດລະເຫລີງໃຈ. ເຂົາເຈົ້າຮຽກຮ້ອງໃຫ້ປ່ຽນມາເປັນການຕ່າວໂຈມຕີຢ່າງໄວວາ ໃນຂອບເຂດທົ່ວປະເທດ ແລະສະແດງຄວາມປະຫລາດໃຈວ່າ ເປັນຫຍັງຄະນະບໍລິຫານງານສູນກາງພັກ ຈຶ່ງວາງແນວທາງ ກະກຽມເງື່ອນໄຂຢ່າງລະອຽດຮອບຄອບ ສຳລັບການບຸກໂຈມຕີເທື່ອໃໝ່. ເພື່ອເຮັດໃຫ້ ສະຫາຍເຫລົ່ານັ້ນຫລຸດຜ່ອນຄວາມໃຈຮ້ອນ ປະທານໂຮ່ຈິມິນ ເວົ້າວ່າ:

"ພວກເຮົາຍັງຢູ່ໃນທ່າກະກຽມເພື່ອປ່ຽນໄປເປັນການບຸກໂຈມຕີຄັ້ງໃຫຍ່ ຢ່າງແຂງແຮງ...ເວລາໃດກະກຽມຄົບຖ້ວນສົມບູນແລ້ວ ຈຶ່ງຈະບຸກໂຈມຕີໃຫຍ່. ການກະກຽມຍິ່ງສົມບູນ, ຮອບດ້ານຫລາຍເທົ່າໃດ, ການຕ່າວໂຈມຕີຄັ້ງໃຫຍ່ຍິ່ງຈະດຳເນີນໄປຢ່າງໄວວາ ແລະ ຈະມີຜົນສຳເລັດຈຸດໄຊເທົ່ານັ້ນ. ພວກເຮົາບໍ່ຄວນຟ້າວຟັ່ງບໍ່ຄິດໜ້າຄິດຫລັງ ບໍ່ຄວນໃຈຮ້ອນວູ່ວາມ..."

ສົງຄາມຕໍ່ຕ້ານຂອງປະຊາຊົນຫວຽດນາມ ໄດ້ຂະຫຍາຍຕົວມາເຖິງໄລຍະ ຊຶ່ງຮຽກຮ້ອງໃຫ້ພັກຕ້ອງກຳນົດຢ່າງຈະແຈ້ງວ່າ ການປະຕິວັດຫວຽດນາມພວມຢູ່ໃນ ໄລຍະຂະຫຍາຍຕົວອັນໃດ. ໃນບົດລາຍງານ "ກ່ຽວກັບການປະຕິວັດຫວຽດນາມ" ທີ່ສະຫາຍເຈືອງຈິງ ອ່ານທີ່ກອງປະຊຸມໃຫຍ່ ໄດ້ຍົກອັນໃຫ້ເຫັນບົດສະຫລຸບໜຶ່ງ ທີ່ມີລັກສະນະຫຼັກການວ່າ ຢູ່ຫວຽດນາມກຳລັງດຳເນີນການປະຕິວັດຊາດປະຊາທິປະໄຕ, ນັ້ນແມ່ນໄລຍະຂ້າມຜ່ານ ບົນເສັ້ນທາງກ້າວໄປສູ່ການປະຕິວັດສັງຄົມນິຍົມ. ບົດລາຍງານເນັ້ນໜັກວ່າ "ໃຕ້ການນຳພາຂອງຊົນຊັ້ນກຳມະກອນ, ການປະຕິວັດດັ່ງກ່າວ ເຊິ່ງມີຊາວຜູ້ອອກແຮງງານເປັນກຳລັງຕົ້ນຕໍ ບໍ່ພຽງແຕ່ຕ້ອງປະຕິບັດໜ້າທີ່ຕ້ານຈັກກະພັດ ແລະ ຕ້ານສັກດີນາເທົ່ານັ້ນ ແຕ່ຫາກຍັງຕ້ອງປະກອບສ່ວນໃຫ້ແກ່ການຂະຫຍາຍຕົວຢ່າງແຂງແຮງ ຂອງລະບອບປະຊາທິປະໄຕປະຊາຊົນ, ຫວ່ານແນວປູກສັງຄົມນິຍົມ, ກໍ່ສ້າງເງື່ອນໄຂເພື່ອກ້າວໄປເຖິງສັງຄົມນິຍົມ. ພາຍຫລັງສຳເລັດໜ້າທີ່ປະຊາທິປະໄຕນາຍທຶນແລ້ວ ການປະຕິວັດດັ່ງກ່າວກໍຕ້ອງກ້າວເຂົ້າສູ່ການປະຕິວັດສັງຄົມນິຍົມ..."

ບົດລາຍງານການເມືອງຂອງປະທານໂຮ່ຈິມິນ ກໍຄືບົດລາຍງານຂອງ ສະຫາຍເຈືອງຈິງ ປະກອບເປັນພື້ນຖານຂອງໂຄງການດຳເນີນງານຂອງພັກ ທີ່ຜ່ານການຮັບຮອງຈາກກອງປະຊຸມໃຫຍ່ຂອງພັກ. ໂຄງການດຳເນີນງານຢັ້ງຢືນວ່າ "ໜ້າທີ່ພື້ນຖານຂອງການປະຕິວັດຫວຽດນາມໃນໄລຍະນີ້ ຄືຂັບໄລ່ພວກຈັກກະພັດຜູ້ຮຸກຮານ, ຍາດເອົາ

ເອກະລາດອັນແທ້ຈິງຂອງປະເທດ ແລະ ບັນລຸຄວາມເປັນເອກະພາບຂອງຊົນຊາດ ຊົນເຜົ່າ, ລຶບລ້າງຮ່ອງຮອຍເສດເຫລືອແບບສັກດິນາ ແລະ ເຄິ່ງສັກດິນາ, ມອບທີ່ດິນໃຫ້ຜູ້ທີ່ທຳການປູກຝັງ, ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງຕັ້ງພື້ນຖານໃຫ້ແກ່ສັງຄົມນິຍົມ".

ກອງປະຊຸມໃຫຍ່ຕົກລົງປ່ຽນຊື່ພັກກອມມູນິດອິນດູຈີນມາເປັນພັກລົມງານ ຫວຽດນາມ ແລະ ປ່ຽນມາເຄື່ອນໄຫວຢ່າງເປີດເຜີຍໃນບາງເຂດ ຊຶ່ງລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຄວບຄຸມຢູ່. ກອງປະຊຸມໃຫຍ່ເປັນເອກະສັນ ກັນເລືອກຕັ້ງໂຮ່ຈິມິນ ເປັນປະທານຄະນະກຳມະການບໍລິຫານງານສູນກາງພັກ ລົມງານຫວຽດນາມ.

ພ້ອມໆກັບການສ້າງຕັ້ງພັກລົມງານຫວຽດນາມນັ້ນ ໄລຍະໃໝ່ໃນຂະບວນ ວິວັດແຫ່ງການຂະຫຍາຍຕົວຂອງການປະຕິວັດປົດປ່ອຍຊາດ ຢູ່ແຫລມອິນດູຈີນກໍ່ໄດ້ເລີ່ມຂຶ້ນ . ຖັດຈາກການສ້າງຕັ້ງພັກລົມງານຫວຽດນາມນັ້ນ ພັກປະຊາຊົນລາວ (ປະຈຸບັນພັກປະຊາຊົນປະຕິວັດລາວ) ແລະ ພັກປະຊາຊົນປະຕິວັດຂະແມ (ພັກປະຊາຊົນປະຕິວັດ ກຳປູເຈຍ ໃນປະຈຸບັນ) ໄດ້ກຳເນີດຂຶ້ນຕາມໆກັນ ບົນພື້ນຖານອະດີດພັກກອມມູນິດ ອິນດູຈີນ.

ການແບ່ງພັກກອມມູນິດອິນດູຈີນອອກເປັນສາມພັກ ທີ່ເປັນເຈົ້າຕົນເອງນັ້ນ ແມ່ນຍ້ອນຈຸດພິເສດຂອງສະຖານະການປະຫວັດສາດໃໝ່ ທີ່ເກີດຂຶ້ນຢູ່ເທິງແຫລມອິນດູຈີນ . "ສະຫະພັນອິນດູຈີນ" ຊຶ່ງພວກຈັກກະພັດສ້າງຂຶ້ນນັ້ນ ບໍ່ມີນຳອີກແລ້ວ. ຫວຽດນາມ , ລາວ, ຂະແມ ກາຍເປັນສາມປະເທດທີ່ເປັນເຈົ້າຕົນເອງ. ການປະຕິວັດປົດປ່ອຍຊາດໃນແຕ່ລະປະເທດນັ້ນ ແມ່ນດຳເນີນໄປໃນໄລຍະຂະຫຍາຍຕົວທີ່ແຕກຕ່າງກັນ.ຍ້ອນແນວນັ້ນຈຶ່ງເປັນທຳມະດາວ່າ ຊາວກອມມູນິດແຕ່ລະປະເທດຕ້ອງມີໜ້າທີ່ແຕກຕ່າງກັນ ດ້ານລັກສະນະ, ຂະໜາດ ແລະ ແບບວິທີແກ້ໄຂ.

ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ 2 ຂອງ ພັກລົມງານຫວຽດນາມ ຊີ້ອອກວ່າ "ໂດຍຄຳນຶງເຖິງເງື່ອນໄຂໃໝ່ທີ່ເກີດມີມາຢູ່ອິນດູຈີນ ແລະ ຢູ່ທົ່ວໂລກ, ພັກລົມງານຫວຽດນາມທີ່ມີໂຄງການການເມືອງ ແລະ ກົດລະບຽບ ເຊິ່ງແທດເໝາະກັບເງື່ອນໄຂຂອງຫວຽດນາມ ຈະຖືກສ້າງຕັ້ງຂຶ້ນຢູ່ຫວຽດນາມ. ອົງການຈັດຕັ້ງປະຕິວັດທີ່ແທດເໝາະກັບສະພາບຕົວຈິງຂອງລາວ ແລະ ຂະແມ ນັ້ນ ກໍຈະໄດ້ຖືກສ້າງຕັ້ງຂຶ້ນຢູ່ສອງ ປະເທດ

27–546

ເຫລົ່ານີ້".

ພ້ອມດຽວກັນນີ້ ປະຊາຊົນສາມປະເທດອິນດູຈີນ ຍັງສືບຕໍ່ພ້ອມກັນສູ້ຮົບຕ້ານສັດຕູ ລວມ ນັ້ນກໍຄືລັດທິລ່າເມືອງຂຶ້ນຝະລັ່ງ. ຈະຕີຊະນະພວກລ່າເມືອງຂຶ້ນຝະລັ່ງໄດ້ກໍຕໍ່ເມື່ອ ມີຄວາມພະຍາຍາມຮ່ວມກັນ ໂດຍຮັດແໜ້ນຄວາມສາມັກຄີແບບສູ້ຮົບໃຫ້ໜັກແໜ້ນກວ່າ ເກົ່າ. ພາຍຫລັງກອງປະຊຸມໃຫຍ່ຂອງພັກຄົນງານຫວຽດນາມ ໜຶ່ງເດືອນ ກອງປະຊຸມ ຂອງບັນດາອົງການຈັດຕັ້ງມະຫາຊົນຜູ້ຮັກຊາດຂອງຫວຽດນາມ ລາວ ຂະແມ ກໍ່ໄດ້ ຖືກ ຈັດຂຶ້ນໃນເດືອນ ມີນາ ປີ ໑໙໕໑. ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ຜ່ານມະຕິປັບ ປຸງພັນທະພາບສູ້ຮົບຂອງປະຊາຊົນສາມປະເທດອິນດູຈີນທີ່ກຳລັງຕໍ່ສູ້ຕ້ານພວກລ່າເມືອງ-ຂຶ້ນ. ກຳລັງຮັກຊາດຂອງສາມປະເທດອິນດູຈີນ ທີ່ກຳລັງສູ້ຮົບນຳເອົາຄວາມສາມັກຄີ ແບບສູ້ຮົບ ແລະ ການຮ່ວມມືທາງດ້ານການເມືອງ ອີງໃສ່ອຸດົມຄະຕິລວມ ທີ່ຖືກປົກ ປັກຮັກສາໄວ້ ດ້ວຍການຕໍ່ສູ້ມັ້ນໄປຕ້ານຢັນນະໂຍບາຍ "ແບ່ງແຍກເພື່ອປົກຄອງ" ຂອງ ພວກຈັກກະພັດ.

ຫລັງຈາກກອງປະຊຸມໃຫຍ່ຂອງພັກ ເວລາແກ້ໄຂບາງໜ້າທີ່ຂອງການຕໍ່ຕ້ານຊຶ່ງ ມີບ່ວນຍິ່ງສັບສົນຂຶ້ນ ຄະນະນຳພາພັກຄົນງານຫວຽດນາມເຫັນວ່າ ນະໂຍບາຍສັງຄົມ ທີ່ ດຳເນີນໄປ ຢູ່ໃນເຂດປົດປ່ອຍບໍ່ແທດເໝາະກັບສະພາບການປະຈຸບັນອີກແລ້ວ. ໃນປີ ໑໙໔໕ ການທີ່ພັກໄດ້ປະລະການດັດສ້າງ ທາງດ້ານສັງຄົມ ແລະ ເສດຖະກິດ ຂັ້ນພື້ນ ຖານຈຳນວນໜຶ່ງ ເປັນເວລາຊົ່ວຄາວ ເຊັ່ນ ການປະຕິຮູບທີ່ດິນນັ້ນ ແມ່ນສິ່ງທີ່ມີເຫດມີ ຜົນ, ເພາະວ່າຮັດແນວນັ້ນ ຊ່ວຍໃຫ້ພັກດຶງດູດເອົາພາກສ່ວນໜຶ່ງຂອງວົງການເຈົ້າທີ່ ດິນສັກດິນາ ແລະ ນາຍທຶນຊາດນິຍົມ ມາຢູ່ຝ່າຍປະຕິວັດ.ມາຮອດເວລານີ້ສະພາບການ ແມ່ນແຕກຕ່າງກັບໃນເມື່ອກ່ອນຢ່າງສິ້ນເຊີງ. ພັກຂອງຊົນຊັ້ນກຳມະກອນຮັບພາລະເປັນ ຜູ້ນຳພາການຕໍ່ຕ້ານ, ສ່ວນແນວໂຮມເອກະພາບແຫ່ງຊາດ ນັບແຕ່ການສ້າງຕັ້ງມັນທຳອິດ ໄດ້ອີງໃສ່ພັນທະພາບກຳມະກອນ ແລະ ຊາວນາ. ສົງຄາມຕໍ່ຕ້ານໄດ້ພົ້ນແຍກ ກຳລັງ ຢ່າງວ່ອງໄວທີ່ສຸດ. ສົງຄາມຕໍ່ຕ້ານ ໄດ້ຫລໍ່ຫລອມນັກປະຕິວັດ ແລະ ນັກຮັກຊາດອັນແທ້ ຈິງ, ຂະນະດຽວກັນ ຍັງໄດ້ປັດເຂ່ຍຜູ້ທໍລະຍົດ ແລະ ພວກປະຕິການ. ໃນປະຈຸບັນລະ ດັບແນວຄິດການເມືອງຂອງຊາວຜູ້ອອກແຮງງານເປັນລ້ານໆຄົນ ເພີ່ມຂຶ້ນໄວກວ່າ ເກົ່າ

ຖ້າສົມທຽບໃສ່ໄລຍະສະຫງົບຂອງການປະຕິວັດ. ຄວາມຫວັງຂອງພວກເຂົາເຈົ້າທີ່ຢາກຫລຸດພົ້ນອອກຈາກຄວາມບໍ່ສະເຫມີພາບທາງສັງຄົມ, ການກົດຂີ່ ແລະ ຂູດຮີດທີ່ໄດ້ຝາກໄວ້ກັບການປົດປ່ອຍຊາດນັ້ນ ນັບມື້ນັບຈະແຈ້ງກວ່າເກົ່າ. ຂະຫນາດຂອງສົງຄາມຕໍ່ຕ້ານຍິ່ງກ້ວາງເທົ່າໃດ ຄວາມຕ້ອງການທາງດ້ານຊັບພະຍາກອນທີ່ເປັນກຳລັງຄົນ ແລະ ວັດຖຸຍິ່ງສູງຂຶ້ນເທົ່ານັ້ນ.

ຄວາມຈຳເປັນຕ້ອງດຳເນີນການດັດສ້າງທາງສັງຄົມ ແລະ ເສດຖະກິດ ຂັ້ນພື້ນຖານ ກ່ອນອື່ນຫມົດຄື ການປະຕິຮູບທີ່ດິນນັ້ນ, ແມ່ນມາຈາກສາເຫດອີກອັນຫນຶ່ງ ທີ່ວ່າສ່ວນໃຫຍ່ຂອງພົນລະເມືອງແມ່ນຊົນຊັ້ນຊາວນາ ເຊິ່ງເປັນຜູ້ປະກອບສ່ວນອັນຕົ້ນຕໍ ເຂົ້າໃນການຕໍ່ສູ້ປະກອບອາວຸດ ຕ້ານພວກຮຸກຮານ; ໙໐% ຂອງນາຍ ແລະ ພົນທະຫານໃນກຳລັງປະກອບອາວຸດຂອງການຕໍ່ຕ້ານ ຖືກກຳເນີດມາຈາກຊາວນາ.

ອັນສຸດທ້າຍ ມາຮອດຕົ້ນຊຸມປີ ໕໐ ການເຄື່ອນໄຫວຂອງພວກທໍລະຍົດ ຈາກອົງການຈັດຕັ້ງການເມືອງປະຕິການຂອງພວກເຈົ້າທີ່ດິນ ແລະ ສັກດີນາ ໄດ້ເພີ່ມຂຶ້ນ. ອົງການຈັດຕັ້ງດັ່ງກ່າວມີພວກລ່າເມືອງຂຶ້ນຝະລັ່ງ ແລະ ນັກສືບຈາກ ເຊອີອາ ເປັນຜູ້ລ້ຽງເກື້ອ. ນັບແຕ່ເວລານັ້ນມາ ອາເມລິກາມີຄວາມກະຕືລືລົ້ນຢາກຍຶດຄອງອິນດູຈີນ. ເຫດການທີ່ສ້າງຄວາມກັງວົນດັ່ງກ່າວ ມັນຮຽກຮ້ອງໃຫ້ຕ້ອງລົບລ້າງພື້ນຖານຂອງຊົນຊັ້ນເຈົ້າທີ່ດິນຫວຽດນາມ ຢ່າງໄວວາ ແລະ ດັບສູນລະບອບສັກດີນາ ທີ່ກີດຫນ່ວງ ຄວາມກ້າວຫນ້າທາງສັງຄົມ.

ອີງໃສ່ເຫດຜົນທັງຫມົດເຫລົ່ານັ້ນ ຢູ່ໃນໂຄງການດຳເນີນງານ ທີ່ພັກຄົນງານຫວຽດນາມ ໄດ້ຜ່ານຢູ່ກອງປະຊຸມໃຫຍ່ຄັ້ງທີ 2 ນັ້ນ ໄດ້ຊີ້ໃຫ້ເຫັນວ່າ ມີຄວາມຈຳເປັນອັນຮີບດ່ວນ ທີ່ຈະຕ້ອງລົບລ້າງຮ່ອງຮອຍເສດເຫລືອຂອງສັກດີນາ ແລະ ເຄິ່ງສັກດີນາ, ມອບທີ່ດິນໃຫ້ພວກທີ່ທຳການປູກຝັງທີ່ດິນ, ທັງຫມົດນີ້ຖືວ່າເປັນບັນຫາຂັ້ນພື້ນຖານ ບັນຫາຫນຶ່ງຂອງການປະຕິວັດຫວຽດນາມ ສະເພາະໄລຍະໃຫມ່ນີ້. ໃນວັນທີ ໑ ເດືອນທັນວາ ປີ ໑໙໕໓ ສະພາແຫ່ງຊາດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ຮັບຮອງເອົາກົດຫມາຍວ່າດ້ວຍການປະຕິຮູບທີ່ດິນ. ກົດຫມາຍໄດ້ລະບຸການຍຶດເອົາ ທີ່ດິນ ແລະ ຊັບສົມບັດຂອງພວກເຈົ້າທີ່ດິນຜູ້ທໍລະຍົດ ແລະ ພວກປະຕິການ ທີ່ເປັນ ລູກແຫລ້ງຕີນມືຂອງພວກລ່າເມືອງຂຶ້ນ, ບັງຄັບໃຫ້ເຈົ້າທີ່ດິນທີ່ມີນ້ຳໃຈປະຊາທິປະໄຕ ແລະ ເຂົ້າຮ່ວມຕໍ່ຕ້ານ ກໍຄືກັບເຈົ້າທີ່ດິນທີ່ບໍ່ມີໂທດກຳຕໍ່ປະຊາຊົນຕ້ອງຂາຍທີ່ດິນປູກຝັງ ແລະເຄື່ອງ

ມີທີ່ໃຊ້ໃນການປູກຝັງ. ທີ່ດິນປູກຝັງ ແລະ ຈຸບສົມບັດທີ່ຖືກຍຶດເອົາໄດ້ ແລະຖືກໄຖຖອນມານັ້ນ ລ້ວນແຕ່ມອບໃຫ້ຊາວນາທຸກ ເປັນເຈົ້າກຳມະສິດ.

ການດຶງດູດເອົາມະຫາຊົນຢ່າງຫລວງຫລາຍ ເຂົ້າຮ່ວມໃນການຕໍ່ສູ້ ເພື່ອກຳຈັດຮ່ອງຮອຍເສດເຫລືອສັກດີນາ ແລະ ການປະຕິບັດຄຳຂວັນ "ມອບທີ່ດິນໃຫ້ຊາວນາ !" ໄດ້ຊຸກຍູ້ການຕໍ່ຕ້ານຢ່າງແຂງແຮງຕື່ມອີກ. ຊາວນາເປັນພັນໆ ຄົນສະໝັກໃຈເຂົ້າເປັນທະຫານຂອງກອງທັບປະຊາຊົນ, ຄົນອື່ນໆເປັນສິບໆພັນຄົນ ກໍຮັດວຽກງານລຳລຽງໃຫ້ກອງທັບຢ່າງເສຍສະຫລະຢູ່ສະໜາມຮົບ ໃຕ້ຫ່າລູກລະເບີດ, ລູກປືນ ພວກເຂົາ ເຈົ້າ ຂົນຍ້າຍສະບຽງອາຫານ ແລະ ລູກກະສຸນໄປໃຫ້ທະຫານຢູ່ແນວໜ້າ, ຖາງທາງຜ່ານພູສູງ, ປ່າຕຶບດົງໜາ.

໔

ໃນເດືອນພະຈິກປີ ໑໙໕໓ ຜູ້ບັນຊາການຄົນໃໝ່ຂອງກອງທັບຝະລັ່ງຢູ່ອິນດູຈີນຄື ນາຍພົນ ນາວາ ລົງມືສຸມກຳລັງທະຫານຈຸ້ມຢັ້ງຂອງທະຫານສິ່ງນອກຝະລັ່ງ ແລະຂອງກອງທະຫານເລວຮັບຈ້າງໃສ່ພາກຕາເວັນຕົກສຽງເໜືອຂອງປາກບໍ່, ໂດຍມີຈຸດປະສົງບຸກໂຈມຕີຢ່າງໜັກໜ່ວງແນວຫລັງຂອງກອງທັບຫວຽດນາມ, ປິດລ້ອມ ແລະ ດັບສູນກອງທະຫານແກນສານຫວຽດນາມ. ຄະນະກຳມະການບໍລິຫານງານສູນກາງພັກຄົນງານຫວຽດນາມ ຕົກລົງຕອບໂຕ້ຕໍ່ການບຸກໂຈມຕີດັ່ງກ່າວ ແລະ ສູ້ຮົບກັບພວກລ່າເມືອງຂຶ້ນຢູ່ບໍລິເວນບ້ານ ດຽນບຽນຟູ.

ໃນເວລາທີ່ກະກຽມບຸກໂຈມຕີລົງຕັດສິນໃສ່ ດຽນບຽນຟູນັ້ນ ພັດມີຄະນະນັກໜັງສືພິມກ້າວໜ້າຕ່າງປະເທດຄະນະໜຶ່ງ ມາຢ້ຽມຢາມຫວຽດບັກ. ບັນດານັກໜັງສືພິມໄດ້ເຂົ້າພົບປະທານໂຮ່ຈີມິນ ແລະ ຂໍໃຫ້ໂຮ່ຈີມິນ ອະທິບາຍໃຫ້ຮູ້ກ່ຽວກັບເຫດການ ທີ່ເກີດຂຶ້ນຢູ່ ດຽນບຽນຟູ, ຊຶ່ງເປັນຊື່ໜຶ່ງທີ່ຖືກນຳມາເວົ້າແລ້ວເວົ້າອີກ ໃນການກະຈາຍສຽງຢູ່ຫວຽດນາມ ແລະ ຢູ່ຕ່າງປະເທດ.

"ອັນນີ້ແມ່ນດຽນບຽນຟູ", ເພິ່ນທັງເວົ້າທັງຫງາຍໝວກຂຶ້ນຢູ່ໜ້າໂຕະ. "ອັນນີ້ແມ່ນພູ", ເພິ່ນໃຊ້ປາຍນິ້ວມື ອັນບອບບາງແຕ່ແຂງແຮງຊີ້ໄປຕາມໃບໝວກ. "ພວກ

ຂ້າພະເຈົ້າຢູ່ໃນບ່ອນນີ້. ສ່ວນຢູ່ເບື້ອງລຸ່ມ", ມືຂອງເພີ່ນຊີ້ລົງກົ້ນຫມວກ, "ແມ່ນທົ່ງພຽງດຽນບຽນຟູ. ທະຫານຝະລັ່ງຕັ້ງຢູ່ບ່ອນນີ້ລະ. ພວກເຂົາບໍ່ສາມາດອອກຈາກບ່ອນນີ້ໄດ້. ອາດເປັນວ່າ ພວກເຂົາຈະຕ້ອງຢູ່ບ່ອນນີ້ອີກດົນ ແຕ່ເດັດຂາດພວກເຂົາ ຈະອອກມານອກບໍ່ໄດ້".

ບັ້ນຮົບດຽນບຽນຟູ ອັນມີຊື່ສຽງດັ່ງກ່າວ ໄດ້ກາຍເປັນແບບຢ່າງຂອງລັດທິ ວິລະຊົນ ອັນລ້ຳເລີດຂອງບັນດານັກຮົບຫວຽດນາມ ແລະ ສິລະປະຍຸດຊຶ່ງໄດ້ເຕີບໂຕຂຶ້ນຂອງກອງບັນຊາການຫວຽດນາມ. ເພື່ອລຳລຽງປືນໃຫຍ່ມາຮອດສະໜາມຮົບ ກອງທັບປະຊາຊົນຫວຽດນາມ ໄດ້ສ້າງທາງຜ່ານປ່າຜ່ານພູຍາວກວ່າ ໓໐໐ ກິໂລແມັດ, ໂດຍບໍ່ໃຫ້ທະຫານສັດຕູຮູ້ຈັກ, ເຖິງວ່າເຮືອບິນຂອງພວກເຂົາບິນສັງເກດການທັງວັນທັງຄືນກໍ່ຕາມ. ເພື່ອອຳພາງພວກທີ່ກໍ່ສ້າງທາງ ຕ້ອງຮັບປະກັນບໍ່ໃຫ້ມີສຽງໝາກມິນແຕກແມ່ນແຕ່ໜ່ອຍດຽວ, ພວກເຂົາໄດ້ໃຊ້ຫລັກສະໄບເຈາະຫີນ ເພື່ອຂຸດພູໃຫ້ຮາບເປັນທາງໃຫ້ລົດແລ່ນໄດ້. ໃນຕອນກາງຄືນ ເຂົາເຈົ້າງົມທາວເຮັດວຽກໂດຍປາສະຈາກແສງໄຟ ຕອນກາງເວັນເຂົາເຈົ້າ ຊ້ຳພັດພາງຕົວຢ່າງລະມັດລະວັງ ເພື່ອປິດບັງຕາສັດຕູ. ການນຳເອົາປືນໃຫຍ່ເຂົ້າໄປໃນສະໜາມຮົບກໍ່ຍິ່ງຕ້ອງລະວັງເປັນພິເສດທີ່ສຸດ. ຕົກມາຮອດ ຕອນກາງຄືນ ທ້ອງຟ້າມືດປານກຳຕາ ນັກຮົບໃຊ້ມືດຶງປືນໃຫຍ່ ໑໐໕ ມມ ອັນໜັກຂຶ້ນເທິງພູ ແລ້ວໃຊ້ເຊືອກກາບມັດປືນໃຫຍ່ເຂົ້າໃສ່ຕົ້ນໄມ້ໃຫຍ່. ມີຫລາຍຄັ້ງເຊືອກຂາດນັກຮົບໂດດເຂົ້າໄປຈ່ອງຕີນປືນໃຫຍ່, ບາງຄັ້ງຕ້ອງເສຍສະຫລະຊີວິດ ເພື່ອກູ້ເອົາປືນໃຫຍ່ບໍ່ໃຫ້ກິ້ງຕົກລົງເຫວ.

ໃນຕອນກາງຄືນ ທັງໆທີ່ຢູ່ໃກ້ກັບທະຫານສັດຕູທີ່ສຸດ, ແຕ່ນັກຮົບກອງທັບປະຊາຊົນຫວຽດນາມກໍ່ຍັງກ້າຂຸດອຸໂມງໄປຈົນຮອດປ້ອມທີ່ໝັ້ນຂອງສັດຕູທີ່ມີຄວາມຍາວກວ່າ ໔໐໐ ກິໂລແມັດ. ຮອດເວລາເລີ່ມຕົ້ນສູ້ຮົບ, ທະຫານຝະລັ່ງທີ່ຕັ້ງຄ້າຍຢູ່ດຽນບຽນຟູ ຈຶ່ງຮູ້ເມື່ອກ່ຽວກັບເລື່ອງນີ້. ຖ້ຳທີ່ເປັນບ່ອນເຊື່ອງປືນໃຫຍ່ຢູ່ເທິງພູນັ້ນ, ມີຫລາຍຈຸດເຊິ່ງທະຫານຝະລັ່ງບໍ່ສາມາດຊອກເຫັນ ຈົນຮອດເວລາທີ່ການສູ້ຮົບສິ້ນສຸດລົງ. ປະຊາຊົນທັງຍິງ ແລະ ຊາຍ, ໜຸ່ມ ແລະ ເຖົ້າ ເປັນພັນໆຄົນ ໄດ້ຊ່ວຍເຫລືອນັກຮົບສຳເລັດວຽກງານອັນຍິ່ງໃຫຍ່ດັ່ງກ່າວ.

ໃນວັນທີ ໑໓ ເດືອນມີນາ ກອງທັບຫວຽດນາມເລີ່ມບຸກໂຈມຕີແບບເປັນຂະບວນ ກອງທະຫານປືນໃຫຍ່ຍິງຖະຫລົ່ມລຽນຕິດປານຫ່າຝົນລົງທີ່ດຽນບຽນຟູ. ວົງປິດລ້ອມ ທະ

ຫານສັດຕູທີ່ນັບມື້ນັບຮັດແຄບເຂົ້າອ້ອມທີ່ໝັ້ນ ທີ່ຕັ້ງຢູ່ທົ່ງພຽງດຽນບຽນຟູ.

ກະແສຂອງການບຸກໂຈມຕີດັ່ງກ່າວເຮັດໃຫ້ກອງບັນຊາການຝະລັ່ງປະຫລາດໃຈ. ອີງຕາມແຜນການ ທີ່ແນໃສ່ຮັກສາປ້ອມທີ່ໝັ້ນໄວ້ຢ່າງໝັ້ນໜຽວ ພວກເຂົາຝາກຄວາມຫວັງໄວ້ນຳກຳລັງຂອງທະຫານປືນໃຫຍ່ ແລະ ການສະໜັບສະໜູນອັນໜາແໜ້ນຂອງກອງທັບອາກາດ. ແຕ່ເວລານີ້ ກອງທັບຫວຽດນາມກໍມີປືນໃຫຍ່ ເຊັ່ນດຽວກັນ.ປືນໃຫຍ່ດັ່ງກ່າວໄດ້ຈັດວາງໄວ້ໃນຫລຸມທີ່ຂຸດຢູ່ຕາມເປີ້ນພູ ແລະ ໄດ້ທຳລາຍທະຫານສັດຕູ ຢ່າງໜັກໜ່ວງ. ນັກຮົບປືນໃຫຍ່ຫວຽດນາມ ໄດ້ຍິງຖະຫລົ່ມໃສ່ເຮືອບິນຝະລັ່ງເກືອບ ໔໐ ລຳຢູ່ກະໂຕທາງຍົນແລ່ນ. ປືນຕໍ່ຕ້ານອາກາສະຍານຂອງຫວຽດນາມໄດ້ຈຳກັດຄວາມສາມາດເຄື່ອນໄຫວຂອງກອງທັບອາກາດຝະລັ່ງໄດ້ຢ່າງຫລວງຫລາຍ. ສະນັ້ນທ່າເໜືອອັນທີສອງຂອງກອງທັບຝະລັ່ງ ຈຶ່ງຖືກປັດເຂ່ຍເຊັ່ນກັນ. ຢູ່ໃນຂັ້ນຮົບດຽນບຽນຟູ, ນັບເປັນເທື່ອທຳອິດທີ່ກອງທັບຫວຽດນາມໃຊ້ປືນໃຫຍ່ທີ່ມີຊື່ວ່າ "ກາຕູຊາ". ໃນຈຳນວນທະຫານເລວຮັບຈ້າງນັ້ນມີທະຫານເຢຍລະມັນບໍ່ໜ້ອຍ ທີ່ເຄີຍເຂົ້າຮ່ວມເຮັດສົງຄາມ ຮຸກຮານຂອງຟາດຊິດ ຮິດແລ ຕ້ານສະຫະພາບໂຊວຽດໄດ້ຮ້ອງຂຶ້ນວ່າ "ກຳລັງໄຟສະຕາລິນກະຣາດ!", ແລ້ວພວກເຂົາກໍໂຍນອາວຸດຖິ້ມ ແລະ ກົ້ງໂຕລົງຂຸມຄອງ ດ້ວຍຄວາມຢ້ານກົວ.

ທະຫານຫວຽດນາມໄດ້ຂຸດອຸໂມງໄປຈົນເກືອບຮອດທີ່ຕັ້ງຂອງທະຫານຝະລັ່ງເຮັດໃຫ້ໄລຍະຫ່າງຂອງການບຸກໂຈມຕີໃຫຍ່ຫຍັບເຂົ້າຈັກໄຊ້. ສຸດທ້າຍອຸໂມງດັ່ງກ່າວ ໄດ້ຫຍັບເຂົ້າໃກ້ກັບປ້ອມຍິງປືນຂອງທະຫານຝະລັ່ງ ແລະ ໜີບຈາກສອງກ້ຳຄີສອງການຄົ້ນເຂົ້າໃນແຕ່ລະປ້ອມ, ແຕ່ລະຈຸດທີ່ຕັ້ງກອງປືນ. ໃນວັນທີ ໗ ເດືອນພຶດສະພາປີ ໑໙໕໔ ພາຍຫລັງ ໕໕ ວັນ ແລະ ຄືນທີ່ສູ້ຮົບຕິດຕໍ່ກັນມາ ທີ່ໝັ້ນປ້ອງກັນໃຫຍ່ທີ່ສຸດ ຂອງພວກລ່າເມືອງຂຶ້ນຝະລັ່ງໄດ້ປະລາໄຊລົງຢ່າງຮາບຄາບ.

ເດີ ກາສຕະຣີ ຜູ້ບັນຊາການທີ່ຫາກໍໄດ້ເລື່ອນຊັ້ນຂຶ້ນເປັນນາຍພົນ ຈຳເປັນຕ້ອງອອກຄຳສັ່ງຍອມຈຳນົນ. ທຸງແດງດາວຄຳອັນເປັນສັນຍານແຫ່ງໄຊຊະນະ ຄັ້ງປະຫວັດສາດຂອງນັກຮັກຊາດຫວຽດນາມໄດ້ປິວສະບັດຢູ່ເທິງຫລັງຂຸມໃຕ້ດິນບັນຊາການ ຂອງສັດຕູ.

໕

ໃນໄລຍະທີ່ກອງທັບຫວຽດນາມ ຫາກໍກະກຽມບຸກໂຈມຕີທະຫານຝະລັ່ງ ຊຶ່ງຕັ້ງຢູ່ ດຽນບຽນຟູນັ້ນ, ເວລາຕອບສຳພາດນັກໜັງສືພິມ ຊຸຍແອດ ປະທານໂຮ່ຈີມິນ ໄດ້ປະກາດອີກເທື່ອໜຶ່ງເຖິງຄວາມປາຖະໜາ ຢາກຈະມີສັນຕິພາບ ແລະ ເຈຕະນາດີ ຂອງປະຊາຊົນຫວຽດນາມ. ເພິ່ນຖະແຫລງວ່າ: "ລັດຖະບານຝະລັ່ງເປັນຜູ້ກໍ່ສົງຄາມຂຶ້ນ ຢູ່ຫວຽດນາມ, ໃນໄລຍະແປດປີມານີ້ ປະຊາຊົນຫວຽດນາມຕ້ອງກຳອາວຸດຕໍ່ສູ້ ຢ່າງພິລະອາດຫານ ຕ້ານສັດຕູຜູ້ຮຸກຮານ ເພື່ອປົກປັກຮັກສາເອກະລາດ ອິດສະຫລະພາບ ແລະສິດໃນການດຳລົງຊີວິດຢູ່ໃນສັນຕິພາບ. ຖ້າພວກລ່າເມືອງຂຶ້ນຝະລັ່ງ ຍັງສືບຕໍ່ເຮັດສົງຄາມຮຸກຮານປະຊາຊົນຫວຽດນາມຈະຕັດສິນໃຈສືບຕໍ່ເຮັດສົງຄາມຮັກຊາດຈົນເຖິງ ໄຊຊະນະສຸດທ້າຍ. ຖ້າວ່າລັດຖະບານຝະລັ່ງຫາກຖອດຖອນບົດຮຽນຢູ່ໃນການເຮັດສົງຄາມ ຂອງຊຸມປີຜ່ານມານີ້ແລະ ຢາກກ້າວໄປເຖິງການຢຸດຍິງຢູ່ຫວຽດນາມ ແລະ ແກ້ໄຂ ບັນຫາຫວຽດນາມ ດ້ວຍສັນຕິວິທີ, ປະຊາຊົນ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຕຽມພ້ອມຮັບເອົາຄວາມປາດຖະໜາດັ່ງກ່າວ".

ຖະແຫລງການຂອງປະທານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ໄຂເສັ້ນທາງໄປສູ່ການແກ້ໄຂການປະທະກັນ ດ້ວຍວິທີທາງການເມືອງ. ຕາມການລິເລີ່ມຂອງສະຫະພາບໂຊວຽດ, ກອງປະຊຸມສາກົນຊຶ່ງມີລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມເຂົ້າຮ່ວມໄດ້ເປີດຂຶ້ນຢູ່ເຊີແນວ. ໄຊຊະນະອັນສະຫວ່າງ ສະໄຫວຂອງກອງທັບປະຊາຊົນຫວຽດນາມຢູ່ດຽນບຽນຟູ ສົ່ງຜົນສະທ້ອນອັນຕັດສິນຕໍ່ການດຳເນີນກອງປະຊຸມຢູ່ເຊີແນວ. ໄຊຊະນະດັງກ່າວ ໄດ້ທຳລາຍຄວາມຫວັງ ຂອງພວກລ່າເມືອງຂຶ້ນທີ່ຢາກຈະຮັກສາແອກຄອບຄອງໄວ້ ຢູ່ຫວຽດນາມຢ່າງສົມເຊິງ, ບັງຄັບໃຫ້ພວກເຂົາຕ້ອງເຊັນສັນຍາເຊີແນວ.

ສັນຍາເຊີແນວ ທີ່ໄດ້ເຊັນໃນວັນທີ ໒໐ ເດືອນກໍລະກົດປີ ໑໙໕໔ ໄດ້ຢຸດຕິ ສົງຄາມ ແລະ ຮັບປະກັນສັນຕິພາບ, ເອກະລາດແຫ່ງຊາດ, ຜືນແຜ່ນດິນອັນຄົບຖ້ວນ ໃຫ້ແກ່ຫວຽດນາມ. ອີງໃສ່ສັນຍານັ້ນ, ເພື່ອສ້າງສັນຕິພາບຄືນ ແລະ ແຍກອອກເປັນກຸ່ມທີ່ເປັນປໍລະປັກກັນ ຫວຽດນາມຖືກແບ່ງອອກເປັນສອງພາກ ເປັນເວລາຊົ່ວຄາວດ້ວຍເສັ້ນຂັ້ນແດນຕາມແລວເສັ້ນຂະໜານທີ ໑໗. ທີ່ປະຊຸມບໍ່ຖືເອົາເສັ້ນຂັ້ນແດນດັ່ງກ່າວ ເປັນຊາຍແດນການເມືອງ. ສັນຍາທີ່ຕົກລົງກັນ ໄດ້ລະບຸໄວ້ວ່າ ໃນເດືອນກໍລະກົດປີ ໑໙໕໖

ຈະຕ້ອງດຳເນີນການເລືອກຕັ້ງ ທີ່ມີລັກສະນະປະຊາທິປະໄຕທົ່ວໄປ ຢູ່ບົນດິນແດນຫວຽດນາມທັງໝົດ ເພື່ອແກ້ໄຂບັນຫາເຕົ້າໂຮມປະເທດໃຫ້ເປັນອັນໜຶ່ງອັນດຽວກັນ.

ການແກ້ໄຂການປະທະກັນຢູ່ຫວຽດນາມໂດຍສັນຕິວິທີບົນພື້ນຖານສັນຍາເຊີແນວປີ ໑໙໕໔ ແມ່ນໄຊຊະນະອັນຍິ່ງໃຫຍ່ຂອງປະຊາຊົນຫວຽດນາມ, ກໍຄືກຳລັງທີ່ຮັກຫອມສັນຕິພາບ ແລະ ກ້າວໜ້າທັງໝົດໃນທົ່ວໂລກ. ປະທານໂຮ່ຈີມິນ ຕີລາຄາໄຊຊະນະ ດັ່ງກ່າວ ດັ່ງຕໍ່ໄປນີ້: "ເປັນຄັ້ງທຳອິດໃນປະຫວັດສາດ ທີ່ປະເທດເມືອງຂຶ້ນໜຶ່ງ ທີ່ບໍ່ໃຫຍ່ປານໃດ ໄດ້ຕີຊະນະປະເທດຈັກກະພັດຫົວເມືອງຂຶ້ນໃຫຍ່. ໄຊຊະນະດັ່ງກ່າວບໍ່ພຽງແຕ່ເປັນຂອງປະຊາຊົນເຮົາເທົ່ານັ້ນ ແຕ່ຫາກຍັງເປັນຂອງກຳລັງສັນຕິພາບ, ປະຊາທິປະ- ໄຕ ແລະ ສັງຄົມນິຍົມທົ່ວໂລກນຳອີກ. ອີກເທື່ອໜຶ່ງທີ່ລັດທິມາກ-ເລນິນ ເຍືອງທາງໃຫ້ແກ່ຊົນຊັ້ນກຳມະກອນ ແລະ ປະຊາຊາດທັງໝົດ ແລະ ນຳເອົາເຂົາເຈົ້າ ໄປເຖິງໄຊຊະນະ ໃນການຕໍ່ສູ້ກູ້ຊາດ ແລະ ປົກປັກຮັກສາໝາກຜົນ ຂອງການປະຕິວັດ".

ວັນທີ ໒໒ ເດືອນກໍລະກົດປີ ໑໙໕໔ ສະໄໝປະຊຸມສຸດທ້າຍຂອງລັດຖະບານສາທາລະນະລັດປະຊາທິປະໄຕຫວຽດນາມ ເປີດຂຶ້ນຢູ່ເຂດກອງຫລອນ. ຂໍ້ກຳນົດ ທີ່ໄດ້ຕົກລົງໃນກອງປະຊຸມເຊີແນວກ່ຽວກັບການຢຸດຍິງກໍຍັງບໍ່ທັນມີຜົນສັກສິດ. ເຮືອບິນຝະລັ່ງຍັງບິນຢູ່ເທິງທ້ອງຟ້າຫວຽດບັກ ສະນັ້ນກອງປະຊຸມຕ້ອງດຳເນີນຢູ່ໃນຖ້ຳໃນພູ. ເຖິງເວລາເປີດປະຊຸມມີຊາຍຄົນໜຶ່ງຂີ່ມ້າສີດຳໄດ້ມາຮອດ, ບຸກຄົນດັ່ງກ່າວກ້າວລົງຈາກຫລັງມ້າ, ພ້ອມດ້ວຍຮອຍຍິ້ມທັກທາຍ ຍ່າງໄປຫາລັດຖະມົນຕີ. ອັນແທ້ຈິງແລ້ວຜູ້ທີ່ຂີ່ມ້າມານັ້ນຄືປະທານໂຮ່ຈີມິນ.

ເພິ່ນກ້າວຂຶ້ນເທິງເວທີທີ່ສ້າງຂຶ້ນຊົ່ວຄາວ, ແນມເບິ່ງເພື່ອນຮ່ວມຮົບຊຶ່ງມີໃບໜ້າແຈ່ມໃສດ້ວຍຄວາມເບີກບານມ່ວນຊື່ນເຊັ່ນດຽວກັນກັບເພິ່ນເອງ. ບໍ່ຮູ້ວ່າໄດ້ເສຍເລືອດເສຍພະລັງໄປຈັກເທົ່າໃດແລ້ວ, ບໍ່ຮູ້ວ່າໄດ້ປະສົບກັບຄວາມທໍລະມານຈັກເທົ່າໃດແລ້ວ, ບໍ່ຮູ້ວ່າໄດ້ອົດຫລັບອົດນອນ ແລະ ກັງວົນມາຈັກຄືນແລ້ວ, ມາບັດນີ້ສະພາບດັ່ງກ່າວ ໄດ້ກາຍເປັນອະດີດຕະການໄປແລ້ວ, ມັນຈະຕ້ອງບໍ່ເກີດຂຶ້ນອີກແລ້ວ. ຄວາມເວົ້າຂອງປະທານໂຮ່ຈີມິນ ກ່ຽວກັບໄຊຊະນະອັນຍິ່ງໃຫຍ່ ຊຶ່ງປະຊາຊົນຫວຽດນາມຍາດເອົາມາໄດ້, ຍັງດັງກ້ອງກັງວານດ້ວຍຄວາມພາກພູມໃຈ. ເພິ່ນເວົ້າວ່າ ກອງທັບປະຊາຊົນ ຫວຽດ

ນາມ ແລະ ປະຊາຊົນຫວຽດນາມໄດ້ສຳເລັດໜ້າທີ່ອັນໜັກໜ່ວງທີ່ສຸດຂອງການຕໍ່ຕ້ານໄດ້ຢ່າງຈົບງາມ. ຢູ່ໃນຕໍ່ໜ້ານີ້ມີໜ້າທີ່ໜຶ່ງທີ່ມີຄວາມສຳຄັນບໍ່ໜ້ອຍນັ້ນກໍຄື ການຕໍ່ສູ້ເພື່ອຄວາມເປັນເອກະພາບຂອງປະເທດຊາດ, ເພື່ອຍາດເອົາເອກະລາດ, ປະຊາທິປະໄຕມາໃຫ້ຊາດ, ເພື່ອປັບປຸງສັນຕິພາບ.

ເພິ່ນໄດ້ເລົ່າເຖິງເລື່ອງທີ່ໜ້າເສົ້າໃຈວ່າ ປະຊາຊົນພາກໃຕ້ຈະທຸກໃຈເຖິງຂັ້ນໃດ ເມື່ອເວລາເຂົາເຈົ້າໄດ້ອອກໄປສົ່ງກອງທັບປະຊາຊົນທີ່ຂຶ້ນມາຮ່ວມຢູ່ພາກເໜືອ . ພາກໃຕ້ໄດ້ລຸກຂຶ້ນຕໍ່ສູ້ກ່ອນໝູ່ ປະຊາຊົນນາມໂບ ເປັນຜູ້ເຈັບແສບທໍລະມານ ກວ່າໝູ່ໝົດ. ປະຊາຊົນພາກໃຕ້ຊ້ຳພັດຍັງຈະຕ້ອງມີຊີວິດຢູ່ ດ້ວຍຄວາມລຳບາກພາຍໃຕ້ ອຳນາດປົກຄອງປະຕິການ ເຖິງວ່າມັນຈະເປັນພຽງໄລຍະຊົ່ວຄາວກໍຕາມ. ແຕ່ພາກໃຕ້ ກໍ່ຈະຕໍ່ສູ້ພ້ອມກັນກັບພາກເໜືອເພື່ອຄວາມເປັນເອກະພາບຂອງປະເທດຊາດ, ຈະຕໍ່ສູ້ເພື່ອດຳເນີນການເລືອກຕັ້ງທົ່ວປະເທດຢ່າງໄວວາ.

ປະທານໂຮ່ຈິມິນ ເນັ້ນໜັກວ່າ ສະພາວະການໃໝ່ ໜ້າທີ່ໃໝ່ ກ່ຽວກັບການຟື້ນຟູເສດຖະກິດ, ອຸດສາຫະກຳ, ກົມມະນາຄົມຂົນສົ່ງ ແລະ ຕົວເມືອງ ຍັງຈະຮຽກຮ້ອງໃຫ້ພະນັກງານພັກ ຕ້ອງມີຄວາມຮັບຜິດຊອບບໍ່ໜ້ອຍກວ່າ ປາງສົງຄາມຕໍ່ຕ້ານນັ້ນ. ກ່ອນອື່ນໝົດ ຄືໃນເມື່ອກ່ອນ, ບັນຫາສຳຄັນທີ່ສຸດ ຄືພັກຕ້ອງສາມັກຄີເປັນເອກະພາບ, ຕ້ອງດຶງດູດເອົາປະຊາຊົນມາຢູ່ຝ່າຍຕົນ ແລະ ຕ້ອງປັບປຸງແນວໂຮມແຫ່ງຊາດໃຫ້ໄດ້.

ໃນຈຳນວນນັກໜັງສືພິມຕ່າງປະເທດທີ່ຖືກເຊີນມາຫວຽດບັກ ກ່ອນເວລາທີ່ສຽງປືນແຫ່ງສົງຄາມ ຈະມິດສຽງຢ່າງສົມເຊີງນັ້ນມີຜູ້ກຳກັບການສະແດງຮູບເງົາ ທີ່ມີຊື່ສຽງຂອງໂຊວຽດຄື ໂຣມັງ ກາກແມນ. ເພິ່ນຖ່າຍທຳຟິມກ່ຽວກັບປະເທດຫວຽດນາມ ທີ່ສູ້ຮົບ. ເພິ່ນຫວນຄືນເຖິງການພົບປະກັບໂຮ່ຈິມິນໃນຫລາຍໆຄັ້ງດັ່ງຕໍ່ໄປນີ້:

"ເສັ້ນທາງນ້ອຍເລັດລອດໄປຫວ່າງກາງກໍໄມ້ທີ່ຊອນລອນກັນໃນປ່າຕຶບ ຊຶ່ງມີພຽງແຕ່ຄົນພາທາງເທົ່ານັ້ນຈຶ່ງຈະຮູ້ຈັກ. ເຮືອນໄມ້ໄຜ່ຂອງປະທານໂຮ່ຈິມິນຕັ້ງຢູ່ຫວ່າງກາງກໍໄມ້, ເບິ່ງແລ້ວບໍ່ຕ່າງຫຍັງກັບເຮືອນຂອງຊາວນາຫວຽດນາມເປັນພັນໆຫລັງ. "ສຳນັກປະທານ", ປະທານ ໂຮ່ຈິມິນເບີຍຍິ້ມເມື່ອເວົ້າເຖິງເຮືອນຂອງເພິ່ນ. ໜັງສືພິມ ແລະ ວາລະສານໃໝ່ທີ່ວາງກອງຕັ້ງກັນໄວ້ຢູ່ເທິງໂຕະເຮັດວຽກ, ຢູ່ແປະຂ້າງ ແມ່ນຈັກພິມດີດ, ສາດເຮັດດ້ວຍຜື ກໍປູຢູ່ເທິງພື້ນເຮືອນໃຊ້ເປັນຕຽງນອນ".

"ຂ້າພະເຈົ້າໄດ້ຊິນເຄີຍກັບການຢູ່ຄືຈັ່ງຊີ້ແລ້ວລະ, ປະທານໂຮ່ຈິມິນເວົ້າ ເພື່ອ

ຕອບແສງຕາອັນແປກປະຫລາດຂອງພວກຂ້າພະເຈົ້າ. "ພວກສະຫາຍເບິ່ງນີ້ແມ, ບໍ່ວ່າຍາມໃດ ຂ້າພະເຈົ້າອາດຈະອອກເດີນທາງໄດ້ໃນທັນທີໂລດ. ຂຸມປີ່ຕໍ້ສູ້ປະຕິວັດ ແລະເຄື່ອນໄຫວປະຕິວັດໃຕ້ດິນ ໄດ້ສອນຂ້າພະເຈົ້າໃຫ້ລຶງເຄີຍກັບສະພາບຄືແນວນີ້. ດ້ວຍຄວາມຄ່ອງແຄ້ວບໍ່ຕ່າງຫຍັງກັບກອງຫລອນ, ພຽງແຕ່ ໕ ນາທີເທົ່ານັ້ນ ກໍກະກຽມ ສຳເລັດ ແລະ ອາດເຄື່ອນທັບອອກ ທັນທີໂລດ".

ເພິ່ນເວົ້າຈາພາທີກັບພວກຂ້າພະເຈົ້າເປັນພາສາລັດເຊຍ. ພວກຂ້າພະເຈົ້າຖາມເພິ່ນວ່າ:

"ປະທານ ຮຽນພາສາລັດເຊຍຍາກຫລາຍບໍ ?"

ເພິ່ນຕອບວ່າ:

"ນັກປະຕິວັດຕ້ອງຮູ້ຈັກພາສາເວົ້າຂອງ ເລນິນ".

"ປະທານເຮັດວຽກມື້ໜຶ່ງຈັກຊົ່ວໂມງ ?"

"ນົກປ່າເປັນຜູ້ປຸກຂ້າພະເຈົ້າ, ສ່ວນເວລາເຂົ້ານອນແມ່ນເວລາທີ່ມີດວງດາວຢູ່ເຕັມທ້ອງຟ້າ".

ຕໍ່ມາ ພວກຂ້າພະເຈົ້າຈຶ່ງຮູ້ວ່າ ມັນບໍ່ແມ່ນຄືແນວນັ້ນຈັກດີ. ຫລາຍເທື່ອ ທີ່ພວກຂ້າພະເຈົ້າເຫັນປະທານຄ້ຳໄມ້ຄ້ອນເທົ້າ ຈ້ອນຂາໂສ້ງ ແລະ ຈ້ອນແຂນເສື້ອຂຶ້ນສູງຍ່າງຕາມແສງສະຫວ່າງຂອງຄົບໄຟທີ່ທະຫານປ້ອງກັນເປັນຜູ້ເຍືອງທາງຮອມໆ ໃນປ່າດົງ. ປະທານອອກເດີນທາງໄປບ້ານໃດບ້ານໜຶ່ງ ທີ່ຕັ້ງຢູ່ຫ່າງໄກໃນພູຜາ ຫລື ກັບມາຈາກກອງປະຊຸມຂອງລັດຖະບານທີ່ໃຊ້ເວລາດົນນານ.

ຂ້າພະເຈົ້າຂໍອະນຸຍາດປະທານ ຖ່າຍຮູບເຮືອນຫລັງສຸດທ້າຍຂອງເພິ່ນ ທີ່ຕັ້ງຢູ່ໃນປ່າ. ເພິ່ນກໍເຫັນດີນຳ.

ຂ້າພະເຈົ້າຍັງໄດ້ຖ່າຍຮູບເອົາເພິ່ນໃນຂະນະທີ່ກຳລັງຍ່າງຢູ່ເທິງທົ່ງນາ, ເວລາເພິ່ນປີນພູ, ເວລາເພິ່ນກຳລັງລອຍນ້ຳຫ້ວຍ. ຂ້າພະເຈົ້າຮູ້ວ່າ ຈະບໍ່ມີເວລາໃດ ທີ່ຂ້າພະເຈົ້າຈະມີໂອກາດຄືນມາອີກແລ້ວ. "ສະໄໝຢູ່ໃນປ່າ" ເປັນເວລາດົນນານເຖິງ ໑໑ ປີຈະຍັງເຫລືອໄວ້ບໍ່ເທົ່າໃດມື້ເທົ່ານັ້ນ ອີກບໍ່ດົນ ສະໄໝນີ້ຈະສິ້ນສຸດລົງຢ່າງຕະຫລອດ–ການ. ປະທານມີອາຍຸໄດ້ ໖໔ ປີແລ້ວ ເພິ່ນໄດ້ເດີນທາງ ຢ່າງບໍ່ຮູ້ອິດບໍ່ຮູ້ເມື່ອຍ ເປັນພັນໆກິໂລແມັດ ຢູ່ເທິງເສັ້ນທາງຂອງປະເທດ, ໂດຍຖືໄມ້ຄ້ອນເທົ້າຕິດຕົວຕະຫລອດເວ–ລາ. ແມ່ນແນວນັ້ນແທ້ໃດ! ຮູບພາບຕອນໜຶ່ງ ໃນຮູບເງົາທີ່ຂ້າພະເຈົ້າກຳລັງຖ່າຍໃນ

ປະຈຸບັນ ກາຍເປັນຮູບພາບຂອງປະຫວັດສາດ".

໗ ປີກ່ວາກ່ອນນີ້, ນັກຮົບທີ່ຢູ່ໃນກອງພົນນະຄອນຫລວງທີ່ມີຊື່ສຽງ ໄດ້ຫນີປະຮ່າໂນ້ຍ ໄປດ້ວຍນ້ຳຕາ. ແຕ່ຕະຫລອດຊຸມປີດັ່ງກ່າວ ເຖິງວ່າເຂົາເຈົ້າມີການສູ້ຮົບຢູ່ບ່ອນໃດກໍຕາມ, ເຂົາເຈົ້າກໍຍັງເຊື່ອຫມັ້ນວ່າ ເຂົາເຈົ້າຈະກັບຄືນມາເຫັນກຳແພງ ອັນເກົ່າແກ່ ຂອງນະຄອນຫລວງອັນແສນຮັກ ແລະ ວັນນັ້ນກໍມາຮອດແທ້.

ວັນທີ ໑໐ ເດືອນຕຸລາ ປີ ໑໙໕໔ ຮ່າໂນ້ຍຄຳນັບຮັບຕ້ອນຢ່າງຄຶກຄື້ນ ກົມກອງແກ່ນສານຂອງກອງທັບປະຊາຊົນຫວຽດນາມ. ກົມກອງຊ່າງແສງ ແລະ ປືນໃຫຍ່ ຂອງກອງພົນ ໓໐໘ ຊຶ່ງເປັນກອງພົນວິລະຊົນ ມຸ່ງຫນ້າເຂົ້າສູ່ນະຄອນຫລວງຈາກສອງທິດ.

ດວງຕາເວັນສາດແສງລົງມາສູ່ນະຄອນ ແລະ ສະຫນາມຫລວງຮ່າໂນ້ຍ ຊຶ່ງແອອັດໄປດ້ວຍຊາວນະຄອນຫລວງທີ່ນຸ່ງຫົ່ມງາມຄືໃນມື້ບຸນ. ທຸງສີແດງເປັນພັນໆຜືນ ຖືກປະດັບປະດາຕາມຕຶກຮາມບ້ານຊ່ອງ. ແຜ່ນປ້າຍຄຳຂວັນເນ່ງຂ້າງທາງ ມີໃຈຄວາມຊົມເຊີຍປະທານໂຮ່ຈີມິນ, ຊົມເຊີຍພັກ, ຊົມເຊີຍກອງທັບປະຊາຊົນ. ປ້າຍຄຳຂວັນ, ທຸງດັ່ງກ່າວໄດ້ກະກຽມໄວ້ແຕ່ຕອນກາງຄືນຢູ່ເບື້ອງຫລັງບານປະຕູທີ່ອັດແຈບ ແລະ ຍາມໃດກໍຖືກຂົ່ມຂູ່ດ້ວຍຄວາມຕາຍໃນເວລາທີ່ຍັງບໍ່ທັນປົດປ່ອຍ.

"ກອງພົນນະຄອນຫລວງ" ມຸ່ງຫນ້າເຂົ້າຮ່າໂນ້ຍ ຈາກທິດຕາເວັນຕົກ.

ນັກຮົບທີ່ຫາກໍເຂົ້າມາຮອດນະຄອນ ຊຶ່ງມີຫ່າຝົນດອກໄມ້ຫລົ່ນລົງໃສ່ຫົວຄືນ ຢ່າງບໍ່ຮູ້ຫມົດຮູ້ສ້ຽງ, ຕະຫລອດທາງທີ່ກອງທັບເດີນຜ່ານ. ຮ່າໂນ້ຍຄຳນັບຮັບຕ້ອນ ທະຫານປົດປ່ອຍຂອງຕົນທ່າມກາງສຽງໂຮ້ຮ້ອງປິຕິຊົມຊື່ນ, ທ່າມກາງສຽງເພງ ແລະ ສຽງຕົບມືຊົມເຊີຍຢ່າງສຸດຈິດສຸດໃຈ. ຊຸມປີຢູ່ໃຕ້ແອກກົດຂີ່ອັນຫນັກຫນ່ວງຂອງພວກລ່າເມືອງຂຶ້ນ ຊຸມປີທີ່ຢືນຢູ່ຕໍ່ຫນ້າປາຍປືນຂອງສັດຕູ, ຊຸມປີແຫ່ງການຕໍ່ສູ້ດ້ວຍຄວາມເຊື່ອຫມັ້ນໃນມື້ ປົດປ່ອຍອັນສວຍສົດງົດງາມໄດ້ຜ່ານພົ້ນໄປແລ້ວ. ຢູ່ຕໍ່ຫນ້າແມ່ນຊີວິດໃຫມ່ ອັນສວຍສົດງົດງາມ, ສັນຕິພາບ ແລະ ຄວາມຜາສຸກ.

ການຕໍ່ສູ້ຄັ້ງໃຫຍ່

ປະຊາຊົນຂອງປະເທດຫວຽດນາມ ທີ່ເປັນບ້ານເກີດເມືອງນອນຂອງສະຫາຍໂຮ່ຈີມິນ ທີ່ຮັກແພງ ແລະ ທີ່ບໍ່ມີຍາມລືມໄດ້, ນັກມາກຊິດ–ເລນິນິດ ຜູ້ຖະຫນອມຖ່ອມຕົນ ແລະ ສະເຫມີຕົ້ນສະເຫມີປາຍທີ່ສຸດແຫ່ງຍຸກສະໄຫມພວກເຮົາ, ປະຊາຊົນຜູ້ພິລະອາດຫານດັ່ງກ່າວໄດ້ເຮັດໃຫ້ທົ່ວໂລກຕ້ອງຕົກຕະລຶງເປັນພັນໆເທື່ອ ຍ້ອນນ້ຳໃຈ ຮັກຊາດ ແລະ ປະຕິວັດຂອງຕົນ.

ຟີແດນ ກາສຕະໂຣ

໑

ສັນຍາເຈີແນວໄດ້ເປີດຊ່ອງທາງຕົວຈິງ ໃຫ້ປະຊາຊົນຫວຽດນາມ ໄດ້ປະຕິບັດຫນ້າທີ່ຊາດປະຊາທິປະໄຕ ຕາມທີ່ການປະຕິວັດເດືອນສິງຫາໄດ້ບົ່ງໄວ້ດ້ວຍສັນຕິວິທີແລະວິທີທາງການເມືອງ, ກໍຄືໃຫ້ບັນລຸການສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ພາຍໃນຂອບເຂດຊາຍແດນຂອງຕົນ ຄືໃນວັນທີ ໔ ເດືອນກັນຍາ ປີ ໑໙໔໕. ແຕ່ວ່າບົນເສັ້ນທາງປະຕິບັດຄວາມມຸ່ງມາດປາດຖະຫນາແຫ່ງຊາດ ຂອງປະຊາຊົນ ຫວຽດນາມ, ກ່ອນອື່ນຫມົດ ຄວາມມຸ່ງມາດປາດຖະຫນາຢາກເປັນປະເທດທີ່ມີເອກະພາບ ນັ້ນ ສັດຕູຕົວໃຫມ່ທີ່ມີອັນຕະລາຍກວ່າສັດຕູໂຕກ່ອນຕັ້ງທົບເທົ່າ ຊ້ຳພັດປະກົດຕົວຂຶ້ນ. ສັດຕູຕົວນັ້ນກໍຄືຈັກກະພັດອາເມລິກາ.

ເປົ້າຫມາຍໂດຍກົງ ຂອງວົງການກຳອຳນາດສະຫະລັດອາເມລິກາ ທີ່ແຊກແຊງໂດຍກົງ ເຂົ້າໃນວຽກງານພາຍໃນຂອງຫວຽດນາມນັ້ນ ແມ່ນເຮັດໃຫ້ຫວຽດນາມ ພາກ

ໃຕ້ທີ່ຖືກຕັດແຍກອອກຈາກສາທາລະນະລັດປະຊາທິປະໄຕ ຫວຽດນາມເປັນການຊົ່ວຄາວ ຕົກຢູ່ໃນຂອບເຂດຂອງລະບົບລ່າເມືອງຂຶ້ນ, ດັບສູນກຳລັງ ປະຊາທິປະໄຕທີ່ກ້າວໜ້າ, ສ້າງຕັ້ງລະບອບຫຸ່ນ, ສະກັດກັ້ນການແຜ່ຂະຫຍາຍຂອງຂະບວນການປະຕິວັດປົດປ່ອຍ ຢູ່ອິນດູຈີນ ແລະ ອາຊີອາຄະເນໃນຂັ້ນຕໍ່ໄປ.

ທາງວໍຊິງຕັນ ເຂົ້າໃຈເປັນຢ່າງດີວ່າ ຖ້າປະຕິບັດສັນຍາເຈນີແນວ ຢ່າງເຄັ່ງຄັດ ແລະ ກ່ອນອື່ນໝົດ ຖ້າດຳເນີນການເລືອກຕັ້ງທົ່ວໄປຢູ່ຫວຽດນາມ ຕາມກຳນົດເວລາທີ່ຄາດໝາຍໄວ້ ອາດຈະນຳໄປເຖິງບ່ອນເຕົ້າໂຮມຫວຽດນາມໃຫ້ເປັນເອກະພາບ ພາຍໃຕ້ການນຳພາຂອງພັກຄົນງານຫວຽດນາມ ເພາະວ່າ ພາຍຫລັງທີ່ການຕໍ່ຕ້ານ ພວກລ່າເມືອງຂຶ້ນຝະລັ່ງໄດ້ຮັບໄຊຊະນະ ອິດທິພົນຂອງພັກກອມມູນິດ, ໂດຍສະເພາະ ຂອງປະທານໂຮ່ຈີມິນ ແມ່ນໃຫຍ່ຫລວງທີ່ສຸດ ຢູ່ພາກເໜືອກໍຄືກັນກັບຢູ່ພາກໃຕ້. ຢູ່ໃນບັນທຶກຄວາມຊົງຈຳຂອງຕົນ ໄອເຊັນຮາວ ປະທານາທິບໍດີ ສະຫະລັດອາເມລິກາ ໃນເວລານັ້ນ ໄດ້ຂຽນໄວ້ໃນພາກທີ່ເວົ້າກ່ຽວກັບແນວທາງການເມືອງຢູ່ຫວຽດນາມ ຂອງລັດຖະບານຂອງເພິ່ນເອງ ດັ່ງຕໍ່ໄປນີ້ວ່າ: "...ບໍ່ວ່າໃຜກໍຕາມ ທີ່ຮູ້ສະພາບການ ອິນດູຈີນເປັນຢ່າງດີ, ທີ່ເຄີຍໄດ້ໂອ້ລົມຫລືແລກປ່ຽນຈິດໝາຍກັບຂ້າພະເຈົ້າ ລ້ວນແຕ່ ຮັບຮູ້ວ່າ ຖ້າດຳເນີນການເລືອກຕັ້ງທົ່ວໄປຢູ່ຫວຽດນາມ, ອາດຈະມີເຖິງ ໘໐% ຂອງຜູ້ມີສິດປ່ອນບັດທີ່ຈະປ່ອນບັດເອົາໂຮ່ຈີມິນ". ດາແລັດ ລັດຖະມົນຕີກະຊວງການຕ່າງປະເທດ ກໍຍັງຮັບຮູ້ສິ່ງດັ່ງກ່າວຄືກັນ. ໃນໂທລະເລກທີ່ ດາແລັດ ສົ່ງເຖິງນັກການທູດອາເມລິກາຜູ້ຮັບຜິດຊອບບັນຫາອິນດູຈີນ, ຊຶ່ງເພິ່ນໄດ້ສົ່ງໄປໃນວັນທີ ໗ ເດືອນກໍລະກົດປີ໑໙໕໔ ໝາຍຄວາມວ່າ ກ່ອນການເຊັນສັນຍາເຈນີແນວກ່ຽວກັບບັນຫາອິນດູຈີນ, ເພິ່ນເອງ ຊີ້ໃຫ້ເຫັນຢ່າງໜ້າໄຫວ້ຫລັງຫລອກວ່າ "ແນ່ນອນວ່າ ການດຳເນີນການເລືອກຕັ້ງ ທົ່ວປະເທດໝາຍເຖິງການເຕົ້າໂຮມຫວຽດນາມໃຫ້ເປັນເອກະພາບກັນ ໂດຍຢູ່ພາຍໃຕ້ ອຳນາດຂອງໂຮ່ຈີມິນ ບໍ່ໄວກໍຊ້າ, ຍ້ອນແນວນັ້ນ ຫລັງຈາກການເຊັນສັນຍາຢຸດຍິງຈົ່ງຕ້ອງຮີດແນວໃດເພື່ອຖ່ວງດຶງເວລາຂອງການເລືອກຕັ້ງທີ່ຈະເກີດຂຶ້ນ ໃຫ້ຊ້າເທົ່າໃດຍິ່ງດີ".

ດັ່ງນັ້ນ ກ່ອນເວລາເຊັນສັນຍາເຈນີແນວ ອາເມລິກາໄດ້ຫັນໄປໃຊ້ວິທີ ທຳລາຍມ້າງເພວິທີແກ້ໄຂບັນຫາຫວຽດນາມດ້ວຍສັນຕິວິທີ ຊຶ່ງໄດ້ລະບຸໄວ້ໃນສັນຍາ. ກ່ອນອື່ນໝົດ ທາງການວໍຊິງຕັນ ອອກແຮງຊອກຄົ້ນຫານັກການເມືອງ ຊຶ່ງອາເມລິກາ ອາດຈະອີງໃສ່ໄດ້ໃນການແຊກແຊງເຂົ້າຫວຽດນາມພາກໃຕ້. ຈາກນັ້ນບໍ່ດົນອາເມລິກາຊອກໄດ້

ບຸກຄົນໜຶ່ງຄືແນວນັ້ນແທ້. ເຂົາຜູ້ນັ້ນກໍຄື ໂງດິນຢຽມ, ຊຶ່ງເປັນຄົນທີ່ໄດ້ຈົບຈາກ ໂຮງຮຽນນັກບວດຢູ່ ໄລວູດ ລັດ ນິວເຈີຊີ ທີ່ອາເມລິກາ ແລະ ມີສາຍພົວພັນກັບເຊີອາແຕ່ປີ ໑໙໔໘. ກ່ອນເຊັນສັນຍາເຊີແນວ ສອງອາທິດ, ພະນັກງານເຊີອາ ທີ່ເຄື່ອນໄຫວຢ່າງຕັ້ງໜ້າ ຢູ່ອິນດູຈີນ ໄດ້ຍົກ ຢຽມ ຂຶ້ນຮັບຕຳແໜ່ງນາຍົກລັດຖະມົນຕີ ຂອງລັດຖະບານຫຸ່ນ ບາວດາຍ.

ພາຍໃນເດືອນທຳອິດພາຍຫລັງທີ່ຢຸດຍິງແລ້ວ, ວໍຊິງຕັນ ເພີ່ມທະວີກົງຈັກ ການທະຫານ ການທູດ ແລະ ເສດຖະກິດຂອງອາເມລິກາ ຢູ່ພາກໃຕ້ຫວຽດນາມຢ່າງຫລວງຫລາຍ. ບັນດາຜູ້ຕາງໜ້າ ແລະ "ທີ່ປຶກສາ" ອາເມລິກາເຂົ້າມາແທນພວກ ຝະລັ່ງ. ຈາກນັ້ນບໍ່ດົນ ຄົນອາເມລິກາໄດ້ຖືສິດເປັນຜູ້ນຳພາ ທຸກໆດ້ານການເຄື່ອນໄຫວຂອງລະ-ບອບໄຊງ່ອນ.

ທາງດ້ານຣູບການ ບາວດາຍ ທີ່ພັກຢູ່ຝະລັ່ງໃນເວລານັ້ນ ຍັງເປັນປະມຸກລັດຫວຽດນາມພາກໃຕ້. ອັນນີ້ບໍ່ເປັນທີ່ພໍໃຈສຳລັບວົງການກຳອຳນາດອາເມລິກາ ຍ້ອນວ່າພວກເຂົາກຳລັງວາງແຜນຈະຫັນປ່ຽນຫວຽດນາມພາກໃຕ້ ໃຫ້ກາຍເປັນເມືອງຂຶ້ນ ແບບໃໝ່ຂອງພວກເຂົາ. ເພື່ອປັດເຂ່ຍບາວດາຍ "ທີ່ປຶກສາ" ອາເມລິກາ ໄດ້ຊ່ວຍເຫລືອ ໂງດິນຢຽມ ຈັດຕັ້ງອັນທີ່ເອີ້ນວ່າ ການລົງປະຊາມະຕິກ່ຽວກັບຣູບການປົກຄອງ ຢູ່ຫວຽດນາມພາກໃຕ້. ໃນການລົງປະຊາມະຕິນີ້ ປະຊາຊົນຕົກຢູ່ໃນສະພາວະ ບໍ່ມີທາງອອກ, ໝາຍຄວາມວ່າເຂົາເຈົ້າຕ້ອງລົງຄະແນນສຽງສະໜັບສະໜູນລະບອບປະຊາທິປະໄຕ ຊຶ່ງມີບາວດາຍ ທີ່ຖືກປະຊາຊົນຫວຽດນາມຄຽດຊັງ ເປັນຕົວແທນຫລືລົງຄະແນນສຽງສະໜັບສະໜູນລະບອບສາທາລະນະລັດ ໝາຍຄວາມວ່າ ສະໜັບສະໜູນ ໂງດິນຢຽມ. ການລົງປະຊາມະຕິ ພັດດຳເນີນໄປໃນສະພາບນາບຂູ່ ໜີບຮັດ ແລະ ຫລອກລວງຢ່າງຫຍາບຊ້າ. ເປັນທຳມະດາວ່າ ໝາກຜົນຂອງມັນ ໄດ້ຖືກກຳນົດໄວ້ກ່ອນແລ້ວ. ວັນທີ ໒໖ ເດືອນຕຸລາ ປີ ໑໙໕໕, ໄດ້ປະກາດສ້າງຕັ້ງປະເທດ "ສາທາລະນະລັດ ຫວຽດນາມ" ຊຶ່ງມີໂງດິນຢຽມ ເປັນຫົວໜ້າຢູ່ໄຊງ່ອນ. ອາເມລິກາ, ອັງກິດຮັບຮູ້ "ສາທາລະນະລັດ" ດັ່ງກ່າວໃນທັນທີ ແລະ ຖັດຈາກນັ້ນບໍ່ດົນ ຝະລັ່ງກໍຮັບຮູ້ເຊັ່ນກັນ.

ໂດຍໄດ້ຮັບການເຫັນດີຈາກຜູ້ປົກຄອງ ຊຶ່ງຢູ່ຟາກພົ້ນມະຫາສະໝຸດ, ກ່ອນອື່ນໝົດ ໂງດິນຢຽມ ລົງມືປະຕິບັດແຜນການຍຸດທະສາດທີ່ໄດ້ວາງໄວ້ແລ້ວ ກ່ຽວກັບການແບ່ງແຍກປະເທດຫວຽດນາມຕະຫລອດໄປ. ການປາບປາມຢ່າງໂຫດຫ້ຽມ ຂອງເຈົ້າ

ຫນ້າທີ່ຕຳຫລວດ ໄດ້ດຳເນີນໄປຢູ່ທົ່ວດິນແດນພາກໃຕ້ຫວຽດນາມແຕ່ເສັ້ນຂະຫນານທີ໑໗ ລົງມາ. ຜູ້ທີ່ເຂົ້າຮ່ວມຕໍ່ຕ້ານພວກລ່າເມືອງຂຶ້ນຟະລັ່ງ, ສະມາຊິກພັກກອມມູນິດແລະພັກປະຊາທິປະໄຕ, ຜູ້ທີ່ວາງຕົວເປັນກາງ ກໍຄືທຸກຄົນທີ່ເຫັນດີນຳການປະຕິບັດສັນຍາ ເຊີແນວ ລ້ວນແຕ່ຖືກຈັບກຸມ, ຖືກຍິງເປົ້າໂດຍບໍ່ມີພິຈາລະນາຄະດີ ແລະ ຕັດສິນ. ໂງດິນຢຽມ ບໍ່ເອົາຫົວຊານຳຂໍ້ສະເຫນີຈຳນວນຫລວງຫລາຍ ຂອງລັດຖະບານສາທາລະນະລັດປະຊາທິປະໄຕ ຫວຽດນາມ ກ່ຽວກັບການພິຈາລະນາເງື່ອນໄຂດຳເນີນ ການເລືອກຕັ້ງທົ່ວປະເທດ ທີ່ໄດ້ກຳນົດໄວ້ຢູ່ໃນສັນຍາເຊີແນວປີ ໑໙໕໔ ກ່ຽວກັບຫວຽດນາມ.

ແມ່ນ້ຳເບັນຮາຍ ທີ່ບໍ່ກວ້າງປານໃດ ເປັນເຂດແບ່ງເສັ້ນຂັ້ນແດນຊົ່ວຄາວ. ຈັກກະພັດອາເມລິກາ ແລະ ຕີນມືພວກເຂົາຊອກວິທີຫັນປ່ຽນແມ່ນ້ຳ ເບັນຮາຍ ໄປເປັນ ຊູປະສັກທີ່ບໍ່ສາມາດຜ່ານຂ້າມໄດ້, ຄືຈົ່ງວ່າຫວຽດພາກເຫນືອ ແລະ ຫວຽດນາມພາກໃຕ້ຕັ້ງຢູ່ຄົນລະຟາກຝັ່ງຂອງມະຫາສະຫມຸດກວ້າງໃຫຍ່ໄພສານ. ກະແສນ້ຳຄືປາຍຫອກປາຍງ້າວຂອງພວກເພັດຊະຄາດ ເຊິ່ງບໍ່ຮູ້ອີດູກູນາ ໄດ້ຕັດແບ່ງປະເທດອອກເປັນສອງທ່ອນ, ຕັດແຍກຫມາກຫົວໃຈຂອງຄົນເປັນລ້ານໆຄົນເປັນສອງປ່ຽງ, ພວກເຂົາຕ້ອງດຳລົງຊີວິດຢູ່ຫ່າງໄກຈາກພີ່ນ້ອງເຊື້ອວົງດຽວກັນ, ຈາກເພື່ອນມິດ ແລະ ຈາກສະຫາຍ. ນັບແຕ່ນັ້ນມາ ໃນຫລາຍໆສິບປີ ພາກເຫນືອ ແລະ ພາກໃຕ້ໄດ້ຂະຫຍາຍຕົວຕາມເສັ້ນທາງທີ່ແຕກຕ່າງກັນຢ່າງສິ້ນເຊີງ.

ຢູ່ຫວຽດນາມພາກເຫນືອ ການດຳເນີນການປະຕິຮູບທີ່ດິນປູກຝັງ ໄດ້ສຳເລັດລົງແລ້ວ, ຊົນຊັ້ນເຈົ້າທີ່ດິນສັກດີນາຖືກລົບລ້າງ, ຄຳຂວັນທີ່ວ່າ ມອບ "ທີ່ດິນໃຫ້ແກ່ຜູ້ທີ່ທຳການປູກຝັງທີ່ດິນ" ໄດ້ຖືກປະຕິບັດໃຫ້ປະກົດເປັນຈິງ, ການຫັນເປັນສະຫະກອນກະເສດໄດ້ເລີ່ມຕົ້ນຂຶ້ນ.

ໃນຊ່ວງໄລຍະປີ ໑໙໕໗–໑໙໖໐ ຊາວຜູ້ອອກແຮງງານຂອງສາທາລະນະລັດປະຊາທິປະໄຕ ຫວຽດນາມ ໄດ້ຮັບໄຊຊະນະໃນແຜນການສາມປີແຫ່ງການຂະຫຍາຍ ເສດຖະກິດ. ຫວຽດນາມພາກເຫນືອກ້າວເຂົ້າສູ່ເສັ້ນທາງປະຕິຮູບຢ່າງກວ້າງໃຫຍ່ດ້ານເສດຖະກິດ ແລະ ສັງຄົມ ອັນເປັນຂີດຫມາຍແຫ່ງການໄຂໄລຍະປະຕິວັດສັງຄົມນິຍົມ.

ໃນເດືອນກັນຍາປີ ໑໙໖໐ ກອງປະຊຸມໃຫຍ່ຄັ້ງທີ 3 ຂອງພັກຄົນງານ ຫວຽດນາມໄດ້ໄຂຂຶ້ນທີ່ຮ່າໂນ້ຍ. ພາຍຫລັງ ໒໐ ປີ ແຫ່ງການຕໍ່ສູ້ອັນພິລະອາດຫານ ເປັນຄັ້ງທຳອິດທີ່ກອງປະຊຸມໃຫຍ່ຂອງພັກຖືກຈັດຂຶ້ນຢູ່ນະຄອນຫລວງຂອງປະເທດ.

ໃນບົດປາໄສກ່າວເປີດກອງປະຊຸມໃຫຍ່ຄັ້ງນັ້ນ ປະທານໂຮ່ຈີມິນ ຢັ້ງຢືນວ່າກອງປະຊຸມໃຫຍ່ຄັ້ງທີ 3 ແມ່ນ "ກອງປະຊຸມໃຫຍ່ ແຫ່ງການກໍ່ສ້າງສັງຄົມນິຍົມ ຢູ່ໃນພາກເໜືອຂອງຫວຽດນາມ ແລະ ຕໍ່ສູ້ເພື່ອເຕົ້າໂຮມປະເທດຊາດໃຫ້ເປັນເອກະພາບ ດ້ວຍສັນຕິວິທີ".

ມະຕິກອງປະຊຸມໃຫຍ່ ຊີ້ໃຫ້ເຫັນວ່າ "ການປະຕິວັດຫວຽດນາມ ໃນໄລຍະປະຈຸບັນມີສອງໜ້າທີ່ຍຸດທະສາດດັ່ງຕໍ່ໄປນີ້:

ໜ້າທີ່ທີໜຶ່ງ, ດຳເນີນການປະຕິວັດສັງຄົມນິຍົມຢູ່ຫວຽດນາມພາກເໜືອ.

ໜ້າທີ່ທີສອງ, ປົດປ່ອຍຫວຽດນາມພາກໃຕ້ ອອກຈາກແອກກົດຂີ່ຂອງຈັກກະພັດອາເມລິກາ ແລະ ພວກລູກມື, ເຕົ້າໂຮມປະເທດຊາດໃຫ້ເປັນເອກະພາບ, ສ້າງຄວາມເປັນເອກະລາດ ແລະ ປະຊາທິປະໄຕໃນທົ່ວປະເທດ.

ສອງໜ້າທີ່ຍຸດທະສາດດັ່ງກ່າວ ພົວພັນຢ່າງຂາດຈາກກັນບໍ່ໄດ້ ແລະ ປະກອບສ່ວນເຮັດໃຫ້ທັງສອງໜ້າທີ່ຂະຫຍາຍຕົວ".

ທີ່ປະຊຸມໃຫຍ່ ເລືອກຕັ້ງປະທານໂຮ່ຈີມິນ ເປັນປະທານຄະນະບໍລິຫານງານສູນ-ກາງພັກ ອີກເທື່ອໜຶ່ງ ແລະ ເລືອກເອົາ ສະຫາຍ ເລຢວນ ເປັນເລຂາທິການທີໜຶ່ງຄະນະບໍລິຫານງານ ສູນກາງ ພັກຄົນງານຫວຽດນາມ.

ໃນຊຸມປີແຫ່ງການກໍ່ສ້າງຢູ່ໃນສັນຕິພາບ ປະທານໂຮ່ຈີມິນ ເອົາໃຈໃສ່ຢ່າງຫລວງຫລາຍຕໍ່ບັນຫາຂະຫຍາຍເສດຖະກິດແຫ່ງຊາດຂອງສາທາລະນະລັດ ປະຊາທິປະໄຕຫວຽດນາມ ແລະ ຖືວ່າເປັນບັນຫາອັນດັບໜຶ່ງ. ເພິ່ນໄດ້ໄປຫລາຍບ່ອນເທິງດິນແດນ ຫວຽດນາມພາກເໜືອ, ພົບພໍ້ເປັນປະຈຳກັບພະນັກງານພັກ, ກຳມະກອນ, ຊາວນາ. ເພິ່ນໄດ້ປະກອບຄຳເຫັນ ຢູ່ໃນກອງປະຊຸມຕ່າງໆຢູ່ໃນການໂຮມຊຸມນຸມຂອງອົງການຈັດຕັ້ງພັກ ລັດ ແລະ ມະຫາຊົນ ໂດຍປູກລະດົມຊາວຜູ້ອອກແຮງງານໃຫ້ຕັ້ງໜ້າອອກແຮງ ຢ່າງປະດິດສ້າງ ເພື່ອສັງຄົມນິຍົມ, ເພື່ອຕໍ່ສູ້ໃຫ້ປະເທດຊາດເປັນເອກະພາບ, ເພິ່ນຊີ້ໃຫ້ເຫັນວ່າ: "ຫວຽດນາມພາກເໜືອແມ່ນພື້ນຖານ ແມ່ນອູ່ຂອງກຳລັງສູ້ຮົບຂອງປະຊາຊົນເຮົາ. ຖ້າວ່າພື້ນຖານອັນແໜ້ນແກ່ນແລ້ວ ເຮືອນຈຶ່ງຈະໝັ້ນແກ່ນ. ຮາກເຫງົ້າຂະຫຍາຍຕົວ ລຳຕົ້ນຈຶ່ງແຂງແກ່ນ. ພວກເຮົາຕ້ອງເອົາໃຈໃສ່ປັບປຸງຫວຽດນາມພາກເໜືອ ຢ່າງເນື່ອງນິດລຽນຕິດ, ເຮັດໃຫ້ພາກນີ້ເຂັ້ມແຂງກວ່າເກົ່າ ແລະ ຮັບປະກັນໃຫ້ມີການຂະຫຍາຍຕົວກວ່າເກົ່າ".

ເນື່ອງຈາກການອອກເຫື່ອເທແຮງ ຢ່າງພິລະອາດຫານ ຂອງປະຊາຊົນ ຫວຽດນາມ ພ້ອມການຊ່ວຍເຫລືອອັນໃຫຍ່ຫລວງຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງຢ່າງບໍ່ຄິດຄ່າ ພຽງແຕ່ໃນໄລຍະອັນສັ້ນໆ ຫວຽດນາມພາກເໜືອ ຊຶ່ງເປັນປະເທດກະສິກຳທີ່ຫລ້າຫລັງ ໄດ້ມີບາດກ້າວກະໂດດໃນການຂະຫຍາຍເສດຖະກິດ. ການໄດ້ຮັບໄຊຊະນະໃນການປະຕິບັດແຜນການ ໕ ປີ ຄັ້ງທຳອິດ (໑໙໖໑–໑໙໖໕) ໄດ້ຊ່ວຍ ວາງພື້ນຖານທາງດ້ານວັດຖຸ ແລະ ເຕັກນິກໃຫ້ແກ່ສັງຄົມ ສັງຄົມນິຍົມ. ຂະແໜງການນຳໜ້າຂອງອຸດສາຫະກຳໜັກ ຄື ຫລໍ່ໂລຫະດຳ, ຫລໍ່ໂລຫະສີ, ຜະລິດເຄື່ອງຈັກ,ພະລັງ ໄຟຟ້າ ໄດ້ຖືກສ້າງຂຶ້ນ. ຊົນນະບົດຫວຽດນາມ ໄດ້ປ່ຽນແປງຢ່າງເຖິງກົກເຖິງຮາກ. ສະຫະກອນກະເສດ ແລະ ນິຄົມໃຫຍ່ໆຂອງລັດ ມີຖານະຄອບຄອງຢູ່ໃນຊົນນະບົດ. ຫວຽດນາມພາກເໜືອ ເຊິ່ງໃນເມື່ອກ່ອນຂາດເຂີນ ດ້ານສະບຽງອາຫານ ແຕ່ໃນເວລາ ນັ້ນ ໄດ້ຜະລິດ ຜະລິດຕະພັນກະສິກຳ ຫລາຍກວ່າພາກໃຕ້ ບ່ອນທີ່ເຄີຍເອີ້ນວ່າ ເປັນອູ່ເຂົ້າອູ່ນ້ຳອັນສຳຄັນຂອງປະເທດ. ໃນລະຫວ່າງ ໑໐ ປີແຫ່ງການຂະຫຍາຍຕົວ ຢູ່ໃນສັນຕິພາບນັ້ນ, ການປະຕິວັດວັດທະນະທຳອັນແທ້ຈິງໄດ້ຖືກດຳເນີນໄປ ໄຟກົກໜັງສືຢູ່ໃນໝູ່ປະຊາຊົນໄດ້ຖືກລົບລ້າງຢ່າງສົມບູນ.

ຍາມໃດປະທານໂຮ່ຈີ່ມິນ ກໍ່ເປັນຫ່ວງເປັນໄຍນຳ ການເຊີດຊູບົດບາດ ນຳພາຂອງພັກ ໃນການກໍ່ສ້າງສັງຄົມນິຍົມ, ການປັບປຸງຖັນແຖວພັກທາງດ້ານແນວຄິດ ແລະ ການຈັດຕັ້ງ. ເພິ່ນຍັງເອົາໃຈໃສ່ນຳບັນຫາເຮັດໃຫ້ພັກປະສານສົມທົບຜົນປະໂຫຍດຊາດກັບການປະຕິບັດພັນທະສາກົນຢ່າງຖືກຕ້ອງ. ເພິ່ນຊີ້ໃຫ້ເຫັນຫລາຍເທື່ອວ່າ ພັກແລະປະຊາຊົນຫວຽດນາມ ຕ້ອງຕັ້ງໜ້າປົກປັກຮັກສາວົງຄະນາຍາດສັງຄົມນິຍົມ,ປັບປຸງ ຄວາມສາມັກຄີ ແລະ ຄວາມເປັນເອກະພາບຂອງຂະບວນການກອມມູນິດ ແລະກຳມະກອນສາກົນ ບົນພື້ນຖານ ລັດທິມາກ–ເລນິນ ແລະ ລັດທິສາກົນກຳມາຊີບ,ຕ້ອງສະໜັບສະໜູນການຕໍ່ສູ້ຂອງບັນດາປະຊາຊາດ ເພື່ອເອກະລາດແຫ່ງຊາດ ປະຊາທິປະໄຕ ສັນຕິພາບ ແລະ ສັງຄົມນິຍົມ.

ໂດຍມີຄວາມປິຕິຊົມຊື່ນຕໍ່ຜົນສຳເລັດຂອງຫວຽດນາມພາກເໜືອ ໃນການກໍ່ສ້າງສັງຄົມນິຍົມນັ້ນ ເພິ່ນຂຽນໃນເວລານັ້ນວ່າ "ການກໍ່ສ້າງສັງຄົມນິຍົມຢູ່ປະເທດເຮົາການທີ່ປະເທດເຮົາ ສັງກັດຢູ່ໃນຄອບຄົວໃຫຍ່ສັງຄົມນິຍົມແຫ່ງໂລກ ແມ່ນການປະຕິບັດຂໍ້ວິນິດໄສຂອງ ເລນິນ ກ່ຽວກັບຄວາມອາດສາມາດຂອງປະເທດໜຶ່ງ ທີ່ເປັນເມືອງຂຶ້ນ ແລະ

ທີ່ຫລ້າຫລັງ ແຕ່ກ້າວຂຶ້ນສັງຄົມນິຍົມໂດຍກົງໄດ້ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວແບບທຶນນິຍົມ. ຜົນສຳເລັດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ແມ່ນຜົນທີ່ໄດ້ມາຈາກ ດ້ານໜຶ່ງ ນ້ຳໃຈກຽມພ້ອມເສຍສະຫລະ, ນ້ຳໃຈອາດຫານ ແລະ ຫົວຄິດປະດິດສ້າງຂອງປະຊາຊົນເຮົາ ໃນການປະຕິບັດຕາມຄຳສັ່ງສອນຂອງ ເລນິນ ກ່ຽວກັບ ການຫັນເປັນອຸດສາຫະກຳ ແລະ ການຫັນເປັນສະຫະກອນ; ອີກດ້ານໜຶ່ງ ແມ່ນການຊ່ວຍເຫລືອຢ່າງບໍ່ຄິດຄ່າຖາມອ້າຍນ້ອງຂອງບັນດາປະເທດສັງຄົມນິຍົມ ໂດຍແມ່ນສະຫະພາບໂຊວຽດເປັນຜູ້ນຳໜ້າ".

໒

ຕະຫລອດໄລຍະເວລາດັ່ງກ່າວ ໃນຂະນະທີ່ຕ້ອງສູ້ຊົນເພື່ອໄຊຊະນະຂອງສັງຄົມນິຍົມຢູ່ພາກເໜືອ ຊາວຜູ້ອອກແຮງງານສາທາລະນະລັດ ປະຊາທິປະໄຕ ຫວຽດນາມຍາມໃດກໍ່ຮູ້ສຶກວ່າມີບາດແຜຢູ່ໃນຫົວໃຈ ແມ່ນຄວາມເຈັບປວດທີ່ໄດ້ເຫັນຄວາມທຸກ ທໍລະມານຂອງພີ່ນ້ອງຮ່ວມຊາດ ຢູ່ພາກໃຕ້ ບ່ອນທີ່ກຳລັງປົດປ່ອຍຊາດ ແລະ ປະຊາທິປະໄຕພວມດຳເນີນການຕໍ່ສູ້ອັນລຳບາກກາກກຳ ຕ້ານພວກອາເມລິກາຜູ້ແຊງແຊງ ແລະ ລູກແຫລ້ງຕີນມືຂອງພວກເຂົາ ຜູ້ທຳລາຍມ້າງເຜັສັນຍາເຈນີເນວ.

ໂຮ່ຈິມິນ ແລະ ເພື່ອນຮ່ວມລົບຂອງເພິ່ນ ຍາມໃດກໍ່ຄິດເຖິງພາກໃຕ້ຂອງຫວຽດນາມ. ສ່ວນວົງການຈັກກະພັດຊ້ຳພັດຊອກທຸກວິທີເພື່ອຕັດແຍກຫວຽດນາມພາກໃຕ້ ອອກຈາກສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຢ່າງຕະຫລອດການ ແລະ ເຮັດໃຫ້ພາກໃຕ້ກາຍເປັນເມືອງຂຶ້ນແບບໃໝ່ຂອງພວກເຂົາ. ແນວທາງດຳເນີນ ການປະຕິວັດຊາດ ປະຊາທິປະໄຕ ປະຊາຊົນຢູ່ພາກໃຕ້ໃຫ້ສຳເລັດຜົນ ແລະ ເຕົ້າໂຮມປະເທດຊາດໃຫ້ເປັນເອກະພາບ ໂດຍສັນຕິພົນ ກາຍເປັນແນວທາງລວມຂອງພັກຄົນງານຫວຽດນາມ. ຄຳເວົ້າອັນເປັນປະຫວັດການ ຂອງປະທານໂຮ່ຈິມິນ ເມື່ອປີ ໑໙໔໖ ທີ່ມີເນື້ອໃນວ່າ : "ຫວຽດນາມແມ່ນປະເທດໜຶ່ງປະເທດດຽວ, ຄົນຫວຽດນາມ ແມ່ນປະຊາຊົນ ປະເທດດຽວ.ແມ່ນ້ຳ ອາດຈະບົກແຫ້ງໄດ້ ພູອາດຈະເຈື່ອນໄດ້,ແຕ່ວ່າສັດຈະທຳດັ່ງກ່າວບໍ່ມີໃຜອາດຈະທັບມ້າງໄດ້"ໄດ້ປຸກລະດົມກຳລັງໃຈຂອງຊາວຫວຽດນາມຜູ້ຮັກຊາດ ຫລາຍລ້ານ

ຄົນໃຫ້ລຸກຂຶ້ນຕໍ່ສູ້ກັບສັດຕູໂຕໃໝ່.

ໃນເດືອນທັນວາ ປີ ໑໙໖໐ ກຳລັງຮັກຊາດພາກໃຕ້ຫວຽດນາມໄດ້ສ້າງຕັ້ງແນວໂຮມປົດປ່ອຍແຫ່ງຊາດ ເພື່ອເປັນຜູ້ນຳພາການຕໍ່ສູ້ປະກອບອາວຸດ ຂອງປະຊາຊົນ ພາກໃຕ້, ເພື່ອເອກະລາດ ແລະ ອິດສະຫລະພາບ.

ເພື່ອກອບກູ້ເອົາລະບອບຫຸ່ນນິຍົມອາເມລິກາ ໂດຍແມ່ນພວກເຂົາຈັດຕັ້ງຂຶ້ນເອງຢູ່ໄຊ່ງ່ອນ ຈັກກະພັດອາເມລິກາ ລົງມືປະຕິບັດການແຊກແຊງປະກອບອາວຸດ ໂດຍກົງໂດຍສົ່ງກອງທະຫານເຂົ້າຫວຽດນາມພາກໃຕ້ ແລ້ວກໍ່ສົງຄາມບໍ່ປະກາດ ທາງອາກາດຕ້ານຫວຽດນາມພາກເໜືອ. ປະຊາຊົນຫວຽດນາມຕ້ອງກຳອາວຸດອີກເທື່ອໜຶ່ງເພື່ອປົກປັກຮັກສາເອກະລາດ ແລະ ອິດສະຫລະພາບຂອງຕົນ. ປະຊາຊົນຫວຽດນາມ ໄດ້ເລີ້ມຕົ້ນສົງຄາມຕໍ່ຕ້ານພວກຈັກກະພັດອາເມລິກາຜູ້ຮຸກຮານຄືແນວນີ້.

ໃນໄລຍະເວລາຫລາຍປີ, ໃນຖານະເປັນນັກຂ່າວຂອງສຳນັກຂ່າວສານແຫ່ງສະຫະພາບໂຊວຽດ (ຕາສ), ຂ້າພະເຈົ້າໄດ້ເປັນສັກຂີພິຍານໂດຍກົງ ຂອງຄວາມພິລະອາດຫານດັ່ງກ່າວ. ຮູບພາບແຫ່ງຊຸມມື້ທຳອິດຂອງສົງຄາມ ປະກົດຂຶ້ນເປັນລຳດັບ ໃນຄວາມຄິດຂອງຂ້າພະເຈົ້າ ຄ້າຍຄືກັບວ່າມັນເກີດຂຶ້ນມື້ວານນີ້. ບົນດິນແດນ ທີ່ຫາກໍ່ຍາດເອົາສັນຕິພາບມາໄດ້ ຊຶ່ງເປັນສິ່ງທີ່ຄອງຄອຍມາແຕ່ເຫິງນານ ພັດປະກົດມີ ສຽງຮຽກຮ້ອງດັງກ້ອງຂຶ້ນ: "ໝົດທຸກຄົນຈົ່ງລຸກຂຶ້ນປົກປັກຮັກສາປະເທດຊາດ!". ຕາມຖະໜົນສາຍຕ່າງໆຂອງຮ່າໂນ້ຍ ທະຫານອາສາສະໝັກຝຶກແອບທັງເວັນທັງຄືນ, ທະຫານເຄື່ອນທັບຜ່ານໄປຢ່າງເປັນຂະບວນ, ລົດລານພາຫະນະແກ່ປືນຕໍ່ຕ້ານອາກາສະຍານ ຟ້າວຟັ່ງແລ່ນມຸ່ງໜ້າສູ່ທິດໃຕ້. ໜັງສືພິມໃຫ້ຮູ້ວ່າ, ໃນຊຸມມື້ທຳອິດຂອງສົງຄາມ ໄດ້ມີ ປະຊາຊົນເກືອບໜຶ່ງລ້ານຄົນ ຍື່ນໃບສະໝັກໃຈເຂົ້າເປັນທະຫານຂອງກອງທັບປະຊາຊົນ. ທົ່ວປະເທດຈັບອາວຸດເພື່ອກຽມພ້ອມສູ້ຮົບກັບພວກອາເມລິກາຜູ້ຮຸກຮານທີ່ປະກອບອາວຸດຢ່າງເຕັມອັດຕາ ແລະ ປົກປັກຮັກສາເອກະລາດ ແລະ ອະທິປະໄຕແຫ່ງຊາດ, ປົກປັກຮັກສາສິດຜົນປະໂຫຍດອັນສັກກາລະບູຊາ ໃນການດຳລົງຊີວິດຢູ່ໃນສັນຕິພາບ ແລະ ຢູ່ໃນຄວາມສຸກ.

ເຊັ່ນດຽວກັນກັບປາງສົງຄາມຕໍ່ຕ້ານຄັ້ງທຳອິດ ອີກເທື່ອໜຶ່ງ ທີ່ປະທານໂຮ່ຈີ່ມິນກາຍເປັນສັນຍາລັກທີ່ປຸກລະດົມກຳລັງໃຈຂອງປະຊາຊົນ ໃນການຕໍ່ສູ້ທົ່ວປວງຊົນ. ເດືອນເມສາ ປີ ໑໙໖໔ ເພິ່ນໄດ້ຖືກເລືອກໃຫ້ເປັນປະທານສະພາປ້ອງກັນຊາດສູງສຸດ. ສະພາ

ນັຖຸກສ້າງຕັ້ງຂຶ້ນ ຕາມມະຕິຂອງສະພາແຫ່ງຊາດຂອງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເພື່ອຈັດຕັ້ງການຕໍ່ຕ້ານສັດຕູ. ໃນເມື່ອກ່າວຄຳປາໄສອັນປະທັບໃຈແລະປຸກລະດົມກຳລັງໃຈຕໍ່ສະພາແຫ່ງຊາດ ປະທານໂຮ່ຈີ້ມິນ ອະທິບາຍຢ່າງລະອຽດ ໃຫ້ປະຊາຊົນຫວຽດນາມ ແລະ ທົ່ວໂລກຮູ້ວ່າ ເພື່ອຈຸດປະສົງອັນໃດແດ່ ຊາວຜູ້ຮັກຊາດ ຫວຽດນາມ ຈຶ່ງຕັດສິນໃຈສູ້ຮົບຈົນເຖິງເລືອດຢອດສຸດທ້າຍ ແລະ ເດັດດ່ຽວບໍ່ຍອມຈຳນົນ ຕໍ່ພວກຮຸກຮານ.

ເພິ່ນກ່າວວ່າ: "ລັດຖະບານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ປະກາດຢ່າງສະຫງ່າຜ່າເຜີຍອີກເທື່ອໜຶ່ງ ກ່ຽວກັບຫລັກໝັ້ນອັນສະເໝີຕົ້ນສະເໝີ ປາຍຂອງຕົນວ່າ ເດັດດ່ຽວປົກປັກຮັກສາເອກະລາດ ອະທິປະໄຕ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງປະເທດຫວຽດນາມ. ປະເທດຫວຽດນາມແມ່ນປະເທດດຽວ , ຊາດຫວຽດນາມແມ່ນຊາດດຽວ, ບໍ່ມີໃຜຈະມີສິດລ່ວງລະເມີດສິດອັນສັກກາລະບູຊາ ດັ່ງກ່າວ ຂອງປະຊາຊົນເຮົາ. ຈັກກະພັດອາເມລິກາຕ້ອງເຄົາລົບສັນຍາເຊີແນວ, ຕ້ອງຖອນທະຫານອອກຈາກຫວຽດນາມພາກໃຕ້ ! ນັ້ນແມ່ນວິທີອັນໜຶ່ງອັນດຽວ ເພື່ອແກ້ໄຂບັນຫາສົງຄາມຢູ່ຫວຽດນາມ, ເພື່ອປະຕິບັດສັນຍາເຊີແນວປີ ໑໙໕໔, ເພື່ອປົກປັກຮັກ–ສາສັນຕິພາບໄວ້ ຢູ່ໃນບັນດາປະເທດອິນດູຈີນ ແລະ ອາຊີອາຄະເນ. ບໍ່ມີວິທີການ ແກ້ໄຂອັນໃດອື່ນໝົດ. ນັ້ນແມ່ນຄຳຕອບຂອງປະຊາຊົນ ແລະ ລັດຖະບານເຮົາຕໍ່ຈັກກະພັດອາເມລິກາ".

ເມື່ອກ້າວເຂົ້າໃນການສູ້ຮົບ ຢ່າງເອົາເປັນເອົາຕາຍ ກັບມະຫາອຳນາດຈັກກະພັດໜຶ່ງທີ່ແຂງແຮງທີ່ສຸດໃນໂລກນັ້ນ ປະຊາຊົນຫວຽດນາມບໍ່ໄດ້ຖືກໂດດດ່ຽວ. ປະເທດແຫ່ງມະຫາປະຕິວັດເດືອນຕຸລາ ບັນດາກຳລັງສັນຕິພາບ, ປະຊາທິປະໄຕ ແລະ ສັງຄົມນິຍົມໃນທົ່ວໂລກ ໄດ້ລຸກຂຶ້ນສະໜັບສະໜູນປະຊາຊົນຫວຽດນາມ. ເວລາທີ່ລູກລະເບີດຊຸດທຳອິດຂອງພວກຮຸກຮານອາເມລິກາ ຖືກຖິ້ມລົງໃສ່ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ລັດຖະບານຂອງສະຫະພາບໂຊວຽດ ໄດ້ຖະແຫລງຢ່າງເດັດຂາດວ່າ ສະຫະພາບໂຊວຽດຈະໃຊ້ທຸກມາດຕະການອັນຈຳເປັນ ເພື່ອຄ້ຳປະກັນຄວາມປອດໄພ ແລະ ປັບປຸງຄວາມອາດສາມາດປ້ອງກັນຊາດ ຂອງປະເທດສັງຄົມນິຍົມອ້າຍນ້ອງ. ໃນໄລຍະເວລາອັນສັ້ນໆ ກອງທັບປະຊາຊົນຫວຽດນາມ ໄດ້ຮັບການປະກອບອາວຸດອັນທັນສະໄໝປະເພດຕ່າງໆຂອງສະຫະພາບໂຊວຽດຄື: ລູກສອນໄຟປ້ອງກັນອາກາດ, ປືນຕໍ່ຕ້ານອາ

ກາສະຍານ, ຍົນສູ້ຣົບ ແລະ ເຕັກນິກການທະຫານປະເພດຕ່າງໆ. ສະຫະພາບ ໂຊວຽດ ໄດ້ສົ່ງນັກຊ່ຽວຊານທະຫານໄປຍັງຫວຽດນາມເພື່ອທຳການປະກອບ,ຕິດຕັ້ງ ແລະ ປັບເຕັກນິກການທະຫານ, ພວກເຂົາເຈົ້າໄດ້ຝຶກແອບຊາວຫວຽດນາມໃຫ້ກຳແໜ້ນເຕັກນິກດັ່ງກ່າວ. ພຽງແຕ່ໃນໄລຍະເວລາອັນສັ້ນໆ ຊາວຫວຽດນາມຈຳນວນພັນໆຄົນ ກໍສາມາດກຳໄດ້ເຕັກນິກອັນທັນສະໄໝ ແລະ ກ້າວເຂົ້າສູ່ການສູ້ຣົບ ກັບກອງທັບ ອາກາດຂອງສັດຕູ ຢ່າງໜັກແໜ້ນ. ໂຮງຮຽນການທະຫານ ຂອງສະຫະພາບໂຊວຽດຮັບເອົານັກຮຽນທະຫານຂອງຫວຽດນາມ ຈຳນວນຫລວງຫລາຍ. ນັກຮຽນເຫລົ່ານີ້ ໄດ້ຮັບການກໍ່ສ້າງຕາມຫລັກສູດເລັ່ງລັດ ແລະ ຫລັງຈາກນັ້ນ ກໍໄດ້ຖືກສັບຊ້ອນເພີ່ມເຕີມ ເຂົ້າໃນກອງບິນຕ່າງໆທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່.

ອີງໃສ່ການຊ່ວຍເຫລືອຢ່າງບໍ່ຄິດຄ່າຂອງສະຫະພາບໂຊວຽດ ແລະປະເທດສັງຄົມນິຍົມອ້າຍນ້ອງອື່ນໆ, ໃນເວລາອັນສັ້ນໆ ຊາວກອມມູນິດຫວຽດນາມ ພາຍໃຕ້ການນຳພາຂອງ ປະທານໂຮ່ຈິມິນ ໄດ້ຫັນປ່ຽນ ຫວຽດນາມພາກເໜືອ ໃຫ້ກາຍເປັນ ປ້ອມໝັ້ນອັນແຂງແກ່ນຊຶ່ງໃນຫລາຍປີມານີ້ ເຄື່ອງບິນ ແລະ ເຮືອຮົບຂອງພວກອາເມລິກາຜູ້ຮຸກຮານ ບຸກຕີທຳລາຍກໍໄຮ້ຜົນ. ພວກນາຍພົນຂອງອາເມລິກາ ຕີລາຄາລະບົບປ້ອງກັນອາກາດທີ່ມີປະສິດທິພາບສູງ ທີ່ປະກອບເຕັກນິກທັນສະໄໝຢູ່ຫວຽດນາມວ່າແມ່ນໜຶ່ງໃນລະບົບປ້ອງກັນອາກາດທີ່ເຂັ້ມແຂງທີ່ສຸດໃນປະຫວັດສາດຂອງສົງຄາມ.

ວ.ອີ.ເລນິນ ໄດ້ສັ່ງສອນໄວ້ວ່າ: "...ຍາມໃດພວກຂ້າພະເຈົ້າກໍ່ປະກາດວ່າ ຖ້າຊົນຊັ້ນກຳມາຊີບປະຕິວັດ ຫາກປະລະການດຳເນີນສົງຄາມປະຕິວັດ ທີ່ອາດ ເປັນສິ່ງຈຳເປັນສຳລັບຜົນປະໂຫຍດຂອງສັງຄົມນິຍົມ ການກະທຳດັ່ງກ່າວແມ່ນເລື່ອງໂງ່ຈ້າ"*. ໃນເວລາສົງຄາມຕໍ່ຕ້ານຄັ້ງທີສອງ ໂດຍໝູນໃຊ້ຫລັກການຂອງ ລັດທິມາກ-ເລນິນຢ່າງປະດິດສ້າງ, ປະທານໂຮ່ຈິມິນ ແລະ ເພື່ອນຮ່ວມຮົບຂອງເພິ່ນ ໄດ້ປະຕິບັດຍຸດທະສາດສົງຄາມປະຕິວັດເຊິ່ງສອດຄ່ອງກັບສະພາບຕົວຈິງຂອງຫວຽດນາມຢ່າງສຳເລັດຜົນ, ເຮັດແນວນັ້ນ ເປັນການປະກອບສ່ວນອັນສຳຄັນ ເຂົ້າໃນຄັງສົມບັດແຫ່ງບົດຮຽນຕົວຈິງ ຂອງການປະຕິວັດໂລກ. ປະທານໂຮ່ຈິມິນ ແລະ ເພື່ອນຮ່ວມຮົບຂອງເພິ່ນ ຮູ້ຈັກສົມທົບ ຮູບການຕໍ່ສູ້ທີ່ແຕກຕ່າງກັນຢ່າງມີພົກໄຫວດີ ທາງດ້ານການທະຫານ, ການເມືອງ, ການ

* ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໓໑, ໜ້າ ໗໑.(ເປັນພາສາລັດເຊຍ)

ທູດ. ນີ້ແມ່ນໜຶ່ງໃນບັນດາປັດໄຈຕັດສິນ ທີ່ຮັບປະກັນໄຊຊະນະຂອງພາລະກິດ ອັນເປັນທຳຢູ່ຫວຽດນາມ.

ໃນຂະນະທີ່ຕິຕອບໂຕ້ການບຸກໂຈມຕີ ອັນໂຫດຫ້ຽມຂອງທະຫານຣຸກຣານນັ້ນແມ່ນແຕ່ ໃນໄລຍະຊຸມປີທີ່ລຳບາກກາກກຳທີ່ສຸດຂອງສົງຄາມ, ຫວຽດນາມພາກເໜືອ ກໍຍັງຄົງຣັດຫລ້ອນໜ້າທີ່ແນວຫລັງອັນໜັ້ນແກ່ນ ໃຫ້ແກ່ການຕໍ່ສູ້ປົດປ່ອຍຊາດ ຂອງບັນດາຜູ້ຮັກຊາດພາກໃຕ້ຫວຽດນາມ, ລາວ ແລະ ຂະແມ ໄດ້ຢ່າງດີເລີດ. "ເສັ້ນທາງ ໂຮ່ຈີມິນ" ທີ່ລຸຊເຊືອງຕັດລຽບຊາຍແດນຫວຽດນາມ-ລາວ, ໃນຊຸມປີດັ່ງກ່າວກາຍເປັນ ເສັ້ນທາງສາຍເລືອດທີ່ເຊື່ອມຕໍ່ພາກເໜືອຫວຽດນາມ ກັບພາກໃຕ້ຫວຽດນາມ ກໍຄືກັບ ລາວແລະ ຂະແມ.

ນັບຕັ້ງແຕ່ຊຸມປີແຫ່ງການກະກຽມການປະຕິວັດເດືອນສິງຫາ ແລະ ການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງ ນັກປະຕິວັດຫວຽດນາມກໍໄດ້ນຳໃຊ້ເສັ້ນທາງນ້ອຍທີ່ຊຸ່ມຕົວຢູ່ໃນປ່າເລິກດົງຕຶບນີ້ແລ້ວ ເພື່ອຮັບປະກັນການຕິດຕໍ່ລະຫວ່າງອົງຄະນະພັກຂອງບັກໂບ ແລະນາມໂບ. ໃນທັນທີ ທີ່ສົງຄາມຕໍ່ຕ້ານຄັ້ງທີສອງເລີ່ມຕົ້ນຂຶ້ນ, ດ້ວຍຄວາມບາກບັ່ນພະຍາຍາມຂອງທະຫານຊ່າງແສງ "ເສັ້ນທາງໂຮ່ຈີມິນ" (ພວກນັກໜັງສືພິມ ຕາເວັນຕົກເອີ້ນເສັ້ນທາງດັ່ງກ່າວ ຄືແນວນັ້ນ ເພາະວ່າສຳລັບທົ່ວໂລກແລ້ວ ໂຮ່ຈີມິນໄດ້ກາຍເປັນສັນຍາລັກແຫ່ງການຕໍ່ສູ້ອັນພິລະອາດຫານ ຂອງປະຊາຊົນຫວຽດນາມ) ໄດ້ກາຍເປັນເສັ້ນທາງຫລວງກວ້າງໃຫຍ່ ທີ່ເຊື່ອງຊ່ອນຕົນຢູ່ໃຕ້ຮົ່ມໄມ້ຢ່າງຄ່ອງແຄ້ວ ເຮັດໃຫ້ບັນດານັກບິນສັດຕູບໍ່ມີປັນຍາທີ່ຈະຄົ້ນເຫັນໄດ້. ທັງເວັນ ແລະ ຄືນ ຕາມເສັ້ນທາງສາຍນີ້ ຂະບວນລົດຍົນສົ່ງແລ່ນເປັນສາຍຕິດຕໍ່ກັນ, ບັນທຸກທະຫານອາສາສະໝັກ ອາວຸດ,ລູກປືນ,ສະບຽງອາຫານ,ຢາປົວພະຍາດໄປໃຫ້ກຳລັງປະກອບອາວຸດປົດປ່ອຍພາກໃຕ້ ທີ່ພວມສູ້ຮົບກັບພວກຣຸກຣານ. ກໍແມ່ນດ້ວຍເສັ້ນທາງສາຍນີ້ ທີ່ທະຫານຜູ້ຖືກບາດເຈັບ,ລູກຫລານຂອງບັນດາຜູ້ຮັກຊາດທີ່ເສຍສະຫລະໃນການສູ້ຮົບ ໄດ້ຖືກຈັດສົ່ງໄປຍັງພາກເໜືອ.

ສັດຕູໂຕໃໝ່ ແມ່ນແຂງແຮງກວ່າ ແລະ ອັນຕະລາຍກວ່າສັດຕູໂຕອື່ນໆ ຊຶ່ງປະຊາຊົນຫວຽດນາມເຄີຍໄດ້ສູ້ຮົບຕໍ່ຕ້ານມາແລ້ວ. ສ່ວນຂະໜາດ ແລະ ລະດັບ ຄວາມດຸເດືອດຂ້ຽວຂາດຂອງສົງຄາມທີ່ລະເບີດຂຶ້ນ ກໍລົ້ນກັນຂາດຂຶ້ນ ເມື່ອສົມທຽບໃສ່ທຸກສິ່ງທຸກຢ່າງທີ່ປະຊາຊົນຫວຽດນາມເຄີຍໄດ້ປະສົບມາ. ເຊັ່ນດຽວກັບໃນອະດີດ ປະທານ ໂຮ່ຈີມິນ ຍັງຄົງເປັນສັນຍາລັກອັນມີຊີວິດຊີວາຂອງຄວາມເຊື່ອໝັ້ນຢ່າງແຮງກ້າ ແລະ ໜັກ

ແຫນ້ນ ໃນໄຊຊະນະຂອງພາລະກິດອັນເປັນທຳ ຂອງປະຊາຊົນຫວຽດນາມ. ໃນແຕ່ລະນາທີ ແຕ່ລະຊົ່ວໂມງ ເພິ່ນພະຍາຍາມປູກແນວຄິດສູຂະທັດນິຍົມ ອັນບໍລິສຸດ ຂອງຕົນຂຶ້ນໃນຫມູ່ເພື່ອນຮ່ວມລົບ, ພະນັກງານພັກແລະກອງທັບປະຊາຊົນຜູ້ອອກແຮງງານຫວຽດນາມທຸກຖ້ວນຫນ້າ.

ນີ້ທີ່ຂ້າພະເຈົ້າຈົດຈຳໄວ້ ເປັນພິເສດ ແມ່ນວັນທີ ໑໗ ເດືອນກໍລະກົດປີ ໑໙໖໖ ເມື່ອປະທານໂຮ່ຈິມິນ ສົ່ງຄຳຮຽກຮ້ອງຜ່ານທາງວິທະຍຸກະຈາຍສຽງ ເຖິງພີ່ນ້ອງ ຮ່ວມຊາດໃນທົ່ວປະເທດ ເນື່ອງໃນໂອກາດລະນຶກວັນຄົບຮອບການເຊັນສັນຍາເຊີແນວ. ສອງສາມວັນກ່ອນຫນ້ານັ້ນ ພວກຮຸກຮານໄດ້ລົງມືປະຕິບັດການຂະຫຍາຍສົງຄາມທາງອາກາດຕ້ານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ. ເຮືອບິນຖິ້ມລະເບີດ ໕໐ ລຳ ໄດ້ຖິ້ມລະເບີດຢ່າງປ່າເຖື່ອນລົງໃສ່ເຂດຊານເມືອງຮ່າໂນ້ຍເປັນເທື່ອທຳອິດ. ຍັງມີກົນຄວັນໄຟໄຫມ້ຢູ່ທ້ອງຟ້າເຂດຕົວເມືອງ. ໃນເວລານາທີ ທີ່ຫຍຸ້ງຍາກສັບສົນຄືແນວນັ້ນ ຊາວນະຄອນຫລວງ ແມ່ນປາຖະຫນາຢາກຈະໄດ້ຍິນສຽງເວົ້າອັນປຸກລະດົມກຳລັງໃຈຂອງປະທານໂຮ່ຈິມິນ ທີ່ເຄົາລົບຮັກ ຍິ່ງກວ່າເວລາໃດຫມົດ. ຊາວຫວຽດນາມທຸກຄົນ ທີ່ພ້ອມສູ້ຮົບ ລ້ວນແຕ່ໄດ້ພາກັນຍືນເຝົ້າໂທລະໂຄ່ງຕາມຖະຫນົນຕ່າງໆຂອງຕົວເມືອງ ແລະຊົນນະບົດຢ່າງບໍ່ເຫນັງບໍ່ຕິງ. ບາງຄົນກໍ່ຍືນສະຫງົບງຽບຫູໃສ່ເຄື່ອງວິທະຍຸຮັບຟັງ ຢູ່ຕາມຖານທີ່ຫມັ້ນຂອງກອງຫລອນໃນປ່າເລິກດົງດິບ ຫລືຢູ່ຫລັງບານປະຕູທີ່ປິດສະຫນິດ ຂອງເຮືອນຫລາຍຫລັງ ອັນເປັນຈຸດທີ່ຕັ້ງຂອງການເຄື່ອນໄຫວໃຕ້ດິນ ໃນຕົວເມືອງຕ່າງໆທີ່ຖືກສັດຕູຍຶດຄອງຢູ່ພາກໃຕ້. ສຽງເວົ້າອັນທຸ້ມທ່ຽງຫນັກແຫນ້ນປົນສຳນຽງເມືອງເງ້ອານ ຂອງປະທານໂຮ່ຈິມິນ ໄດ້ດັງກັງວານຂຶ້ນ:

"ບາງທີ ສົງຄາມອາດແກ່ຍາວໄປອີກ ໕ ປີ, ໑໐ ປີ, ໒໐ ປີ ຫລືອາດົນກວ່ານັ້ນອີກ. ຮ່າໂນ້ຍ, ໄຮຟອງ, ຕົວເມືອງ ແລະ ໂຮງຈັກໂຮງງານຈຳນວນຫນຶ່ງ ອາດຈະຖືກທຳລາຍ. ແຕ່ປະຊາຊົນຫວຽດນາມບໍ່ຍ່ອມຢ້ານເດັດຂາດ ! ບໍ່ມີຫຍັງ ປະເສີດກວ່າ ເອກະລາດ ແລະ ອິດສະຫລະພາບ. ມື້ໄຊຊະນະ ຈະມາເຖິງຢ່າງເດັດຂາດ , ປະຊາຊົນເຮົາຈະກໍ່ສ້າງປະເທດຊາດຄືນໃຫມ່, ໂດຍເຮັດໃຫ້ຫວຽດນາມຍິ່ງໃຫຍ່ ແລະ ສວຍງາມກວ່າເກົ່າ".

ຄຳຮຽກຮ້ອງຂອງປະທານໂຮ່ຈິມິນ ທີ່ວ່າ: "ບໍ່ມີຫຍັງປະເສີດກວ່າ ເອກະລາດ ແລະ ອິດສະຫລະພາບ" ໄດ້ແຜ່ຂະຫຍາຍໄປທົ່ວທຸກທິດຂອງປະເທດຫວຽດນາມ ໃນທັນ

ທີ່ທົ່ວໂລກ, ກາຍເປັນຄຳຂວັນຂອງການຕໍ່ສູ້ປົດປ່ອຍຊາດ, ຊີ້ສ່ອງເຍື່ອງທາງໃຫ້ແກ່ນັກຮັກຊາດຫວຽດນາມ ກ້າວຈາກໄຊຊະນະນີ້ໄປສູ່ໄຊຊະນະໃໝ່".

ນີ້ແມ່ນ ສົງຄາມເພື່ອປ້ອງກັນປິຕຸພູມ ແລະ ກອບກູ້ປະເທດຊາດ. ໃນສົງຄາມຕ້ານການບຸກລຸກຂອງພວກຈັກກະພັດຜູ້ຮຸກຮານ ປະຊາຊົນຫວຽດນາມ ຕໍ່ສູ້ປົກປ້ອງເອກະລາດ ອິດສະຫລະພາບ ປົກປັກຮັກສາພື້ນຖານແຫ່ງຊີວິດຂອງຕົນ. ດ້ວຍເຫດນັ້ນ ເມື່ອຮຽກຮ້ອງພີ່ນ້ອງຮ່ວມຊາດໃຫ້ລຸກຂຶ້ນເປັນຄືກັບຄົນດຽວ ໃນການຕໍ່ສູ້ອັນສັກກາລະກັບສັດຕູຄູ່ອາຄາດ, ກ່ອນອື່ນໝົດ ພັກ ແລະ ປະທານໂຮຈີ່ມິນ ປຸກລຸກນ້ຳໃຈຮັກຊາດ, ຄວາມເອກອ້າງໃນຊາດ, ຄວາມຮັກບ້ານເກີດເມືອງນອນທັງຈູດໄຟແຫ່ງຄວາມຄຽດແຄ້ນສັດຕູຜູ້ຮຸກຮານຕ່າງດ້າວໃຫ້ລຸກຂຶ້ນເປັນແປວໄຟ ຢູ່ໃນໝາກຫົວໃຈຂອງທຸກຄົນ.

ປະທານໂຮຈີ່ມິນ ບໍ່ເຄີຍປົນເປພວກອາເມລິກາຜູ້ຮຸກຮານ ກັບປະຊາຊົນອາເມລິກາຈັກເທື່ອ, ເພິ່ນໄດ້ຕັກເຕືອນໃຫ້ຜູ້ອື່ນຈຳແນກຢ່າງຈະແຈ້ງລະຫວ່າງພວກອາເມລິກາຜູ້ຮຸກຮານ ແລະ ປະຊາຊົນອາເມລິກາ. ໃນການໃຫ້ສຳພາດວາລະສານອາເມລິກາສະບັບໜຶ່ງນັ້ນ ເພິ່ນຊີ້ໃຫ້ເຫັນວ່າ:

"ປະຊາຊົນຫວຽດນາມບໍ່ເຄີຍປົນເປປະຊາຊົນອາເມລິກາ ຜູ້ຮັກຫອມຄວາມເປັນທຳ ກັບພວກລັດຖະບານອາເມລິກາ ທີ່ສ້າງໂທດກຳຫລາຍອັນ ຕໍ່ປະຊາຊົນຫວຽດນາມພວກຂ້າພະເຈົ້າ ໃນເວລາ ໑໐ ປີຜ່ານມານີ້. ຜູ້ຄົນທີ່ຢາກຈະມ້າງເພທຳລາຍ ຄວາມເປັນເອກະລາດ ແລະ ອິດສະຫລະພາບ ຂອງຊາດພວກຂ້າພະເຈົ້າ, ນັ້ນແມ່ນຄົນທີ່ລືມຖະແຫລງການທີ່ປະກາດຄວາມເປັນເອກະລາດຂອງສະຫະລັດອາເມລິກາ ຊຶ່ງໃນນັ້ນໄດ້ກ່າວວ່າ "ທຸກຄົນທີ່ເກີດມາ ລ້ວນແຕ່ມີສິດສະເໝີພາບກັນ" ແລະ ໄດ້ບັນຍັດບັນດາສິດທີ່ບໍ່ມີໃຜລ່ວງລະເມີດໄດ້ ຂອງມວນມະນຸດນັ້ນຄື: "ສິດໃນການດຳລົງຊີວິດ, ສິດໃນການມີອິດສະຫລະພາບ ແລະ ສິດໃນການສະແຫວງຫາຄວາມສຸກ".

ເມື່ອຕອບໂຕ້ການຮຸກຮານອັນປ່າເຖື່ອນນັ້ນ, ປະຊາຊົນຫວຽດນາມຜູ້ພິລະອາດຫານກ່ອນອື່ນໝົດ ຕ້ອງເພິ່ງຕົນເອງ, ຕ້ອງອີງໃສ່ຊັບພະຍາກອນດ້ານວັດຖຸ ແລະ ພະລັງປະຕິວັດຂອງຕົນ, ພ້ອມທັງກຳລັງແຮງອັນຍິ່ງໃຫຍ່ຂອງຄວາມສາມັກຄີຖານເພື່ອນມິດ ແລະ ຖານອ້າຍນ້ອງໃນທົ່ວໂລກ. ປະທານໂຮຈີ່ມິນ ແລະ ພັກຄົນງານຫວຽດນາມຮູ້ຈັກຄົ້ນຄວ້າ ແລະ ປະຕິບັດຍຸດທະສາດອັນຖືກຕ້ອງອັນໜຶ່ງອັນດຽວໃຫ້ເປັນຈິງເຊິ່ງແມ່ນຍຸດທະສາດແຫ່ງການສົມທົບຢ່າງຄ່ອງແຄ້ວ ລະຫວ່າງການອອກເຫື່ອແຮງຮອບດ້ານ ໃນ

ລະດັບຊາດ ກັບການສະໜັບສະໜູນອັນກວ້າງຂວາງທີ່ສຸດ ໃນລະດັບທົ່ວໂລກ. ຜູ້ນຳຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ເນັ້ນໜັກຫລາຍຄັ້ງວ່າ ໄຊຊະນະທີ່ປະຊາຊົນຫວຽດນາມຍາດມາໄດ້ ໃນການຕໍ່ສູ້ອັນຍຶດເຍື້ອຍາວນານ ຕ້ານພວກຈັກກະພັດຜູ້ຮຸກຮານ ບໍ່ອາດຕັດແຍກອອກຈາກການຊ່ວຍເຫລືອຮອບດ້ານ ຂອງສະຫະພາບ-ໂຊວຽດ, ປະເທດສັງຄົມນິຍົມອື່ນໆ ແລະ ຂອງກຳລັງກ້າວໜ້າໃນທົ່ວໂລກ.

ປະຊາຊົນຫວຽດນາມຕ້ອງດຳເນີນສົງຄາມຕໍ່ຕ້ານ ທ່າມກາງເງື່ອນໄຂອັນສັບສົນທີ່ສຸດ. ປີ ໑໙໖໔ ຈີນທີ່ເປັນປະເທດບ້ານໃກ້ເຮືອນຄຽງ ຂອງຫວຽດນາມຖືກກະແສຄື້ນອັນໃຫຍ່ໂຕພິລຶກພິລຳທີ່ເອີ້ນກັນວ່າ "ການປະຕິວັດວັດທະນະທຳ" ພັດພາໄປ. ດັ່ງເອກະສານທາງການ ຂອງພັກກອມມູນິດຈີນ ໃນເວລາຕໍ່ມາໄດ້ຍົກຂຶ້ນວ່າ "ພະເດັດການ-ຊົນເສິກສັກດີນາອັນປ່າເຖື່ອນໂຫດຫ້ຽມທີ່ສຸດ" ໄດ້ຖືກສ້າງຕັ້ງຂຶ້ນຢູ່ໃນປະເທດນີ້ເປັນເວລາສອງສາມປີ. ພວກຈັກກະພັດອາເມລິກາ ໄດ້ສວຍໃຊ້ການປ່ຽນແປງຢູ່ຈີນ ເພື່ອສືບຕໍ່ຂະຫຍາຍສົງຄາມຮຸກຮານຕ້ານຫວຽດນາມ.

ນ

ພາຍຫລັງການຖິ້ມລະເບີດລົງໃສ່ ຮ່າໂນ້ຍ ແບບສາຍຟ້າແມບຊຸດທຳອິດ ຂອງກອງທັບອາກາດອາເມລິກາ, ຄະນະກຳມະການປົກຄອງນະຄອນຫລວງຮີບຮ້ອນຍົກຍ້າຍໂຮງລ້ຽງເດັກ, ໂຮງຮຽນ, ໂຮງງານ, ສຳນັກງານອົງການ ອອກໄປຢູ່ເຂດ ຊົນນະບົດ. ການຍົກຍ້າຍນີ້ແທ້ຈິງແລ້ວ ແມ່ນໄດ້ມີຂຶ້ນຕັ້ງແຕ່ກ່ອນພຸ້ນອີກ. ໃນຊຸມມື້ດັ່ງກ່າວຂ້າພະເຈົ້າຍັງຈື່ໄດ້ວ່າ ທຸກຄົນບອກຂ່າວແກ່ກັນຢ່າງວຽບໆໄປທົ່ວນະຄອນຫລວງວ່າປະທານໂຮ່ຈິມິນ ບໍ່ໄດ້ຍົກຍ້າຍເລີຍ ເພິ່ນຍັງຄົງເຮັດວຽກຢູ່ໃນນະຄອນຫລວງ ຄືເມື່ອກ່ອນ, ຢູ່ເຮືອນຮ້ານໄມ້ຂອງເພິ່ນໃນສວນຂອງທຳນຽບປະທານປະເທດ. ສິ່ງດັ່ງກ່າວ ໄດ້ຫຍິບຍື່ນຄວາມເຊື່ອໝັ້ນຕໍ່ໄຊຊະນະ ເຂົ້າໃນຫົວໃຈຂອງທຸກຄົນ.

ໂດຍບໍ່ຫວາດຫວັ່ນຕໍ່ໄພອັນຕະລາຍ ໂຮ່ຈິມິນ ມັກອອກຈາກຮ່າໂນ້ຍໄປຢ້ຽມຢາມກອງລູກສອນໄຟປ້ອງກັນອາກາດ, ພົບປະກັບນັກຮົບອາກາດ ແລະ ນັກຮົບອາສາ ສະໝັກທີ່ໄດ້ສູ້ຮົບດີເດັ່ນກັບຍົນຂອງສັດຕູ. ຢູ່ຫວຽດນາມມີປະເພນີຖາມຂ່າວສຸຂະພາບຂອງ

ຜູ້ທີ່ໂອ້ລົມກັບຕົນ. ເມື່ອເວົ້າເຖິງສຸຂະພາບຂອງປະທານໂຮ່ຈີມິນແລ້ວ ທຸກຄົນກໍວິຕົກກັງວົນເປັນພິເສດ. ດ້ວຍຮອຍຍິ້ມອັນອ່ອນໂຍນເພິ່ນຕອບວ່າ:

"ຖ້າພວກຫລານຍິງຍົນອາເມລິກາໄດ້ຫລາຍເທົ່າໃດ ສຸຂະພາບຂອງລຸງ ກໍຈະແຂງແຮງຫລາຍເທົ່ານັ້ນ".

ມີເທື່ອໜຶ່ງ, ເພິ່ນໄປຢ້ຽມຢາມກອງສູ້ຮົບກອງໜຶ່ງ ພໍດີກົງກັບວັນທີ່ ມົດສະກູອອກຂ່າວວ່າ ຍານອະວະກາດໄດ້ບັນທຸກລົດ "ລູໂນຂົດ" ຂຶ້ນໄປປ່ອຍລົງໜ້າ ດວງຈັນໄດ້ຢ່າງປອດໄພ. ເພິ່ນກໍເລີ່ມຕົ້ນການໂອ້ລົມ ດ້ວຍການຖາມນັກຮົບວ່າ ເຂົາເຈົ້າຮູ້ຈັກເຫດການນີ້ບໍ, ແລ້ວເພິ່ນຈຶ່ງກ່າວວ່າ:

"ຍຸກສະໄໝຂອງພວກເຮົາ ແມ່ນຍຸກສະໄໝວິທະຍາສາດ ແລະ ເຕັກນິກເພື່ອຕີຊະນະອາເມລິກາຜູ້ຮຸກຮານ ຈະມີພຽງແຕ່ແນວທາງອັນຖືກຕ້ອງຂອງພັກ ແລະ ນ້ຳໃຈສູ້ຮົບພິລະອາດຫານເທົ່ານັ້ນ ກໍຍັງບໍ່ພໍ ນອກຈາກນັ້ນຍັງຕ້ອງມີຄວາມຮູ້ກ່ຽວກັບ ວິທະຍາສາດເຕັກນິກນຳອີກ. ນັກຮົບໃນກອງທັບ ຕ້ອງຮ່ຳຮຽນ ແລະ ກຳແໜ້ນວິທະຍາສາດ ແລະ ເຕັກນິກ ຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ ເພື່ອຕອບສະໜອງ ຕໍ່ຄວາມຮຽກຮ້ອງຕ້ອງການ ໃນປະຈຸບັນຢ່າງເປັນປົກກະຕິ".

ປະທານໂຮ່ຈີມິນ ເຈັບປວດທີ່ສຸດເມື່ອໄດ້ຮູ້ຂ່າວວ່າ ພີ່ນ້ອງຮ່ວມຊາດ ຢູ່ພາກໃຕ້ຖືກພວກຈັກກະພັດ ແລະ ລູກມືຂອງພວກເຂົາ ປາບປາມຢ່າງປ່າເຖື່ອນ. ກົງກັນຂ້າມເພິ່ນເບີກບານມ່ວນຊື່ນທີ່ສຸດຕໍ່ໄຊຊະນະ ແຕ່ລະເທື່ອຂອງບັນດາຜູ້ຮັກຊາດຢູ່ພາກໃຕ້. ໃນຊຸມປີຕອນທ້າຍຂອງຊີວິດ ເມື່ອຮູ້ສຶກວ່າຕົນເອງຍັງຈະມີຊີວິດຢູ່ອີກບໍ່ດົນປານໃດ, ເພິ່ນຄິດຢູ່ສະເໝີວ່າ ຕົນເອງຍັງບໍ່ທັນເຮັດຫລ້ອນໜ້າທີ່. ເພິ່ນກະຕືລືລົ້ນຢາກມີຊີວິດຢູ່ຈົນຮອດມື້ທີ່ພາກໃຕ້ໄດ້ຮັບໄຊຊະນະ ແລະ ປະເທດຊາດເປັນເອກະພາບ. ປີ ໑໙໖໙ ເມື່ອສະພາແຫ່ງຊາດ ຕົກລົງມອບຫລຽນໄຊ "ດາວຄຳ" ໃຫ້ໂຮ່ຈີມິນ ເພິ່ນສະແດງຄວາມຂອບໃຈບັນດາຜູ້ແທນຂອງສະພາແຫ່ງຊາດຢ່າງຈິງໃຈ ແລະ ສະເໜີສະພາແຫ່ງຊາດ ວ່າເພິ່ນບໍ່ຂໍຮັບເອົາຫລຽນໄຊອັນສູງສົ່ງນີ້ໃນເວລານີ້ ໃນຂະນະທີ່ປະເທດຊາດຍັງຖືກ ແບ່ງແຍກເປັນສອງພາກ ແລະ ເລືອດຂອງພີ່ນ້ອງຮ່ວມຊາດຜູ້ຮັກຊາດ ຍັງພວມຫລັ່ງລິນ ຢູ່ພາກໃຕ້. ເພິ່ນສະເໜີວ່າ:

"ມື້ໃດພາກໃຕ້ໄດ້ຮັບການປົດປ່ອຍຢ່າງສົມບູນ, ປະເທດຊາດມີສັນຕິພາບ ແລະ ເອກະພາບ, ເໜືອໃຕ້ເຕົ້າໂຮມໃນເຮືອນດຽວ ຂໍໃຫ້ສະພາແຫ່ງຊາດອະນຸຍາດ ໃຫ້ພີ່

ນ້ອງຮ່ວມຊາດພາກໃຕ້ມອບຫລຽນໄຊອັນສູງສົ່ງໃຫ້ແກ່ຂ້າພະເຈົ້າ".

ສະຫາຍ ເລວັນເລືອງ, ນັກຮົບ ອາວຸໂສຜູ້ໜຶ່ງຂອງພັກຈື່ຈຳໄດ້ວ່າ:

"ໃນຊຸມປີ ທີ່ພາກໃຕ້ຕໍ່ສູ້ຕ້ານອາເມລິກາຢ່າງຂຽວຂາດ ລຸງໄດ້ມີຄວາມຕັ້ງໃຈ ຢາກໄປພາກໃຕ້ ເພື່ອພົບປະກັບເພື່ອນຮ່ວມຮົບ ແລະ ພີ່ນ້ອງຮ່ວມຊາດ, ເພິ່ນຂໍຮ້ອງ ໃຫ້ຈັດຕັ້ງການຢ້ຽມຢາມດັ່ງກ່າວ. ລຸງຍົກບັນຫານີ້ຂຶ້ນຢ່າງເດັດຂາດພໍສົມຄວນ. ຍ້ອນ ວ່າອາຍຸລຸງສູງແລ້ວ, ສຸຂະພາບກໍບໍ່ເໝືອນເມື່ອກ່ອນ ບັນດາສະຫາຍ ຈາກກົມການ ເມືອງຈຶ່ງໃຫ້ຄຳຕອບໃນທຳນອງທີ່ວ່າ ປະຈຸບັນນີ້ ອັນສຳຄັນແມ່ນຕີອາເມລິກາໃຫ້ຊະນະ ໄວໆແລ້ວລຸງຈຶ່ງໄປ. ລຸງຕອບວ່າ:

"ລຸງຢາກໄປໃນເວລານີ້, ຫລັງຈາກໄດ້ໄຊຊະນະແລ້ວ ລຸງຕ້ອງໄປຫັ້ນຢ່າງແນ່ ນອນ".

ດົນໆລຸງກໍຍົກຂຶ້ນມາເວົ້າອີກ ແລະ ສັ່ງຖາມວ່າ ການກະກຽມໄປຢ້ຽມຢາມ ເປັນ ແນວໃດ. ໂດຍເຫັນລຸງຕັດສິນໃຈຢ່າງແນ່ວແນ່, ບັນດາສະຫາຍທີ່ຮັບຜິດຊອບ ບັນຫານີ້ ຈຳຕ້ອງລາຍງານວ່າ ທາງໄປພາກໃຕ້ແມ່ນຫຍຸ້ງຍາກລຳບາກຫລາຍ, ຢ້ານລຸງ ໄປບໍ່ ຮອດ. ລຸງໂຮ່ ຕອບວ່າ:

"ຖ້າໄປທາງລົດບໍ່ໄດ້ ລຸງຍ່າງໄປກໍ່ໄດ້. ຖ້າວ່າພວກຫລານໄປໄດ້, ລຸງກໍໄປ ໄດ້ຄືກັນ. ຍັງບໍ່ແນ່ວ່າລຸງຈະຍອມພວກຫລານດອກ".

ໃນຊຸມປີສຸດທ້າຍ, ເຖິງວ່າຈະອ່ອນເພຍ ແຕ່ລຸງກໍຍັງຄົງຝຶກຍ່າງ, ຝຶກປີນ ຂຶ້ນ ເນີນສູງ ແລະ ຫລາຍເທື່ອປີນຂຶ້ນເນີນສູງສົມຄວນ. ພວກທ່ານໝໍພາກັນຫ້າມປາມ,ແຕ່ ລຸງກໍຍັງຄົງຮັດຢູ່. ຂ້າພະເຈົ້າເຫັນວ່າ ລຸງຢາກທົດສອບເບິ່ງເຫື່ອແຮງຂອງຕົນໃນເວ ລານັ້ນວ່າເປັນແນວໃດ ແລະ ບາກບັ່ນຝຶກຝົນເພື່ອປະຕິບັດຄວາມຕັ້ງໃຈ "ລົງໄປ ພາກ ໃຕ້ຫາພີ່ນ້ອງຮ່ວມຊາດ, ເພື່ອນຮ່ວມຮົບ" ໃຫ້ສຳເລັດ.

ລຸງຂໍໃຫ້ພວກເຮົາລາຍງານໃຫ້ເພິ່ນຊາບວ່າ"ເມື່ອໃດຫາກມີສະຫາຍ ທາງພາກ ໃຕ້ມາຮອດ, ຂໍໃຫ້ພວກເຮົາພາເຂົາເຈົ້າມາພົບລຸງ. ສະນັ້ນຈຶ່ງມີພະນັກງານ ນັກຮົບ ຈາກພາກໃຕ້ຫລາຍຄົນທີ່ຂຶ້ນມາພາກເໜືອໄດ້ເຂົ້າພົບລຸງ ໂດຍສະເພາະແມ່ຍິງ ແລະ ຫລານນ້ອຍ. ໃນແຕ່ລະເທື່ອ ລຸງລ້ວນແຕ່ຖາມເຖິງສະພາບການຢ່າງລະອຽດຖີ່ຖ້ວນ , ເຫັນວ່າລຸງມ່ວນຊື່ນທີ່ສຸດ ໃນການພົບພໍ້ຄືແນວນີ້".

ໃນຕອນຕົ້ນປີ ໑໙໖໙ ປະທານໂຮ່ຈິມິນ ພ້ອມດ້ວຍນາຍົກລັດຖະມົນຕີ ຟາມວັນ

ດົງ ໄດ້ຕ້ອນຮັບຜູ້ແທນຂອງຜູ້ຮັກຊາດຈາກຫວຽດນາມພາກໃຕ້. ເມື່ອຕອບຄຳ ທັກທາຍຂອງເພິ່ນ ແມ່ຍິງຜູ້ດຽວໃນຄະນະ ກ່າວຂຶ້ນຢ່າງຮ່ອນຮົນວ່າ:

"ລຸງໂຮ່ ທີ່ເຄົາຣົບນັບຖື, ພວກຫລານຢູ່ພາກໃຕ້ ໄດ້ຈື່ຈຳຄຳສັ່ງສອນ ຂອງລຸງ ແລະ ໄດ້ຕີຊະນະອາເມລິກາຜູ້ຮຸກຮານຢ່າງເກັ່ງກ້າ. ບໍ່ມີຈັກເທື່ອທີ່ພວກຫລານຈະຍອມຖອຍຫລັງ ເຖິງແມ່ນວ່າຈະສູ້ລົບອີກດົນນານປານໃດກໍຕາມ". ເວົ້າມາຮອດນີ້ ນາງຢຸດເວົ້ານ້ອຍໜຶ່ງ ແລ້ວກໍມ້ວນທ້າຍດ້ວຍຄຳເວົ້າອັນບໍ່ຄາດຄິດວ່າ: "ສິ່ງດຽວ ທີ່ພວກຫລານກັງວົນນຳ ແມ່ນລຸງມີອາຍຸສູງແລ້ວ".

ປະທານໂຮ່ຈີ້ມິນ ຍິ້ມແບບຄືນອົກຫລັກ. ເຖິງແມ່ນວ່າເພິ່ນມີອາຍຸເກືອບ ໘໐ ປີແລ້ວກໍ່ຕາມ ແຕ່ຍັງຄົງຮັກສາອາລົມຕະຫລົກໄວ້ຢູ່. ເພິ່ນງວາກໄປຫາ ນາຍົກລັດຖະມົນຕີ ຟາມວັນດົງ ແລ້ວຖາມວ່າ:

"ປີນີ້, ລຸງມີອາຍຸ ເທົ່າໃດແລ້ວ, ອາວ ດົງ..."

"໗໙ ປີ".

"ຊັ້ນກໍແປວ່າຍັງອີກ ໒໑ ປີລຸງຈຶ່ງຈະໄດ້ ໑໐໐ ປີ. ລຸງຍັງຈື່ໄດ້ວ່າ ເຄີຍຮຽກຮ້ອງໃຫ້ເພື່ອນຮ່ວມຊາດສູ້ລົບຕໍ່ໄປ ຖ້າມີຄວາມຈຳເປັນອີກ ໕,໑໐,໒໐ ປີໄດ້.ຖ້າພວກເຮົາຫາກໄດ້ຮັບໄຊຊະນະພາຍໃນ ໒໐ ປີ ລຸງກໍຈະຍັງມີເວລາໜຶ່ງປີ ເພື່ອລົງໄປຢາມຢຸມພໍ່ຕູ້ ແມ່ຕູ້, ພວກອາວ ພວກອາ, ພວກຫລານ ພາກໃຕ້..."

໔

ໃນຊຸມປີ ທີ່ປະຕິບັດວຽກຢູ່ຫວຽດນາມ ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຟັງ ສະຫາຍໂຮ່ຈີ້ມິນ ຫລາຍເທື່ອ. ບັ້ນເດ ເພິ່ນຢືນຢູ່ເທິງເວທີງານໂຮມຊຸມນຸມຂອງຊາວ ຜູ້ອອກແຮງງານ, ໃບໜ້າສົດໃສຍ້ອນຮອຍຍິ້ມອັນເບີກເພີຍ ແລະ ກົ້ງໄປກົ້ງມາ. ເພິ່ນຍົກມືຂຶ້ນສັນຍານໃຫ້ທຸກຄົນມິດງຽບ ແລ້ວກ່າວຕໍ່ຜູ້ທີ່ມາຊຸມນຸມ ດ້ວຍຄຳເວົ້າ ອັນແກ່ວເຄີຍວ່າ:

"ບັດນີ້, ເພື່ອມ້ວນທ້າຍການໂຮມຊຸມນຸມຄຳນັບຮັບຕ້ອນໄຊຊະນະ ໃນການຕໍ່ສູ້ຕ້ານພວກອາເມລິກາຜູ້ຮຸກຮານ, ເພື່ອພາລະກິດປົດປ່ອຍພາກໃຕ້, ຂໍເຊີນພີ່ນ້ອງ ຮ່ວມ

ຊາດຮ່ວມກັນຮ້ອງເພງ "ສາມັກຄີ". ສາມ, ສີ່... ດ້ວຍສຽງອັນດັງນັ້ນ ເພິ່ນກໍຮ້ອງເພງຂຶ້ນເປັນຜູ້ທຳອິດ ຊຶ່ງເປັນເພງທີ່ນັກຮົບກອງຫລອນມັກຮ້ອງຢູ່ໃນປ່າໃນພູຫວຽດບັກ".

ໂຮ່ຈີ່ມິນ ເປັນຜູ້ສັງກັດໃນຖັນແຖວນັກຮົບປະຕິວັດ ຕາມແບບ ເລນິນ ທີ່ແທ້ຈິງ, ບັນດານັກຮົບທີ່ສັງກັດໃນຖັນແຖວນີ້ ບໍ່ພຽງແຕ່ໄດ້ຮັບຮູ້ ແລະ ປະຕິບັດທິດສະດີ ເລນິນຜູ້ຍິ່ງໃຫຍ່ໃຫ້ປະກົດເປັນຈິງເທົ່ານັ້ນ. ດ້ວຍຄຸນສົມບັດສ່ວນຕົວ, ດ້ວຍແບບຢ່າງອັນມີຊີວິດຊີວາ ພວກເພິ່ນສະແດງອອກເຖິງແຮງດຶງດູດອັນແຮງກ້າ ຂອງແນວຄິດກອມມູນິດ. ນັກຂ່າວຜູ້ໜຶ່ງໄດ້ຖາມ ຊານວາດໍ ອາເຢັນເດ, ລູກຮັກຫລານແພງຂອງປະຊາຊົນ ຊີເລວ່າ: "ຄຸນສົມບັດສາມປະການອັນໃດແດ່ ຂອງນັກການເມືອງ ທີ່ທ່ານຢາກຈະມີ ແລະ ທ່ານຖືໃຜເປັນແບບຢ່າງ?" ອາເຢັນເດ ໄດ້ຕອບວ່າ: "ມານະຈິດອັນແນ່ວແນ່, ມະນຸດສະທຳ ແລະ ຄວາມຖະໜອມຖ່ອມຕົນຂອງ ໂຮ່ຈີ່ມິນ".

ຕະຫລອດຊີວິດຂອງເພິ່ນ, ປະທານໂຮ່ຈີ່ມິນ ເປັນຄົນມີນິໄສງ່າຍດາຍແລະຖ່ອມຕົນຕາມແບບ ເລນິນ. ສະຫາຍເລວັນເລືອງ ຍັງຈື່ໄດ້ວ່າ:

"ໃນປີ ໑໙໖໙ ກົມການເມືອງອອກມະຕິກ່ຽວກັບການສະເຫລີມສະຫລອງ໔ ວັນບຸນໃຫຍ່ໃນປີໜ້າ (ລະນຶກວັນສ້າງຕັ້ງພັກ ຄົບຮອບ ໔໐ ປີ, ລະນຶກວັນສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຄົບຮອບ ໒໕ ປີ, ລະນຶກວັນເກີດຂອງ ວ.ອີ.ເລນິນ ຄົບຮອບ ໑໐໐ ປີ ແລະ ວັນເກີດຂອງ ໂຮ່ຈີ່ມິນ ຄົບຮອບ ໘໐ ປີ). ເວລານັ້ນ ລຸງບໍ່ສະບາຍປານໃດ. ກ່ອນໜ້ານັ້ນໄລຍະໜຶ່ງ ກົມການເມືອງໄດ້ສະເໜີວ່າ ເພື່ອຖະໜອມສຸຂະພາບຂອງໂຮ່ຈີ່ມິນ ນັ້ນເພິ່ນຈະເປັນປະທານຂອງກອງປະຊຸມ ເຊິ່ງພິຈາລະນາພຽງແຕ່ບັນຫາຕ່າງໆອັນສຳຄັນທີ່ສຸດເທົ່ານັ້ນ, ສ່ວນບັນຫາອື່ນໆກົມການເມືອງຈະພິຈາລະນາກັນເອງ ແລ້ວຈຶ່ງໄປລາຍງານປະທານໂຮ່ຈີ່ມິນ. ມະຕິຕົກລົງ ກ່ຽວກັບການຈັດຕັ້ງ ໔ ວັນບຸນໃຫຍ່ແມ່ນຕົກໃນກໍລະນີທີສອງນີ້. ເມື່ອຮູ້ກ່ຽວກັບມະຕິ ຂອງກົມການເມືອງແລ້ວ ລຸງບອກວ່າ:

"ຂ້າພະເຈົ້າເຫັນດີເຫັນພ້ອມນຳ "໓/໔" ຂອງມະຕິນີ້ ແລະຖືວ່າ ການຈັດຕັ້ງລະນຶກວັນເກີດ ຄົບຮອບ ໑໐໐ ປີ ຂອງ ວ.ອີ.ເລນິນ ແມ່ນມະຕິຕົກລົງອັນຖືກຕ້ອງ ທີ່ສຸດ. ແຕ່ບໍ່ຄວນຈັດຕັ້ງສະເຫລີມສະຫລອງວັນເກີດຂອງຂ້າພະເຈົ້າແບບກວ້າງຂວາງ ຄືແນວນັ້ນ".

ຜູ້ໃດໄດ້ໃກ້ຊິດປະທານໂຮ່ຈີມິນ ລ້ວນແຕ່ມອງເຫັນຈຸດພິເສດອັນປະເສີດອັນໜຶ່ງຢູ່ໃນນິໄສໃຈຄໍຂອງເພິ່ນທີ່ວ່າ ໃນເອກະສານທີ່ສົ່ງຂຶ້ນມາໃຫ້ເພິ່ນກວດແກ້ ຍາມໃດເພິ່ນກໍຂີດຂ້າປະໂຫຍກທີ່ເວົ້າແບບປະຕິເສດຖິ້ມ. ເປັນຕົ້ນວ່າ: "ບໍ່ມີສັງຄົມນິຍົມ ບັນດາປະຊາຊາດຈຶ່ງບໍ່ສາມາດໄດ້ຮັບການປົດປ່ອຍຢ່າງສົມບູນ", ເພິ່ນໄດ້ແປງໃໝ່ ເປັນ "ມີແຕ່ສັງຄົມນິຍົມເທົ່ານັ້ນ ຈຶ່ງຈະນຳເອົາການປົດປ່ອຍຢ່າງສົມບູນມາໃຫ້ບັນດາ ປະຊາຊາດ..." ສິ່ງນີ້ບໍ່ອາດຖືວ່າເປັນຍ້ອນເພິ່ນມັກດັດແກ້ພາສາລ້ວນໆ. ນັ້ນມັນຕ້ອງເປັນວິທີໃຊ້ຈິນຕະນາການຂອງເພິ່ນ, ວິທີຄົ້ນຄິດອັນແຈ່ມແຈ້ງທີ່ສຸດຂອງຜູ້ນຳການປະຕິວັດຜູ້ໜຶ່ງ. ຍາມໃດ ເພິ່ນກໍຢາກໃຫ້ແຍກລະອຽດແຈ່ມແຈ້ງ ແລະຊອກຫາດ້ານທີ່ເປັນປະໂຫຍດຂອງປະກົດການບໍ່ວ່າປະກົດການໃດກໍຕາມ ທີ່ໄຂເສັ້ນທາງໄປສູ່ຊີວິດ ສູ່ອະນາຄົດ.

ປະທານໂຮ່ຈີມິນ ໄດ້ເອົາໃຈໃສ່ຢ່າງຫລວງຫລາຍ ຕໍ່ບັນຫາສຶກສາອົບຮົມຄຸນສົມບັດອັນສູງສົ່ງຂອງຜູ້ຮັກຊາດ ແລະ ຂອງນັກປະຕິວັດ ໃຫ້ແກ່ສະມາຊິກພັກ, ພະນັກງານ ແລະ ຊາວຜູ້ອອກແຮງງານທຸກຄົນ. ເມື່ອເວລາຮຽກຮ້ອງເຖິງຊາວໜຸ່ມ ເພິ່ນມັກເວົ້າວ່າ: "ບໍ່ວ່າໃນວຽກງານອັນໃດ ກ່ອນອື່ນໝົດ ຫລານຕ້ອງບໍ່ຄິດເຖິງແຕ່ຕົນ ຫາກແຕ່ຕ້ອງຄິດເຖິງພີ່ນ້ອງຮ່ວມຊາດຂອງຕົນ, ຄິດເຖິງທົ່ວປວງຊົນ...ຈົ່ງຢືນຢູ່ແຖວໜ້າຍາມຫຍຸ້ງຍາກ ແລະ ຈົ່ງຢືນຢູ່ບ່ອນສຸດທ້າຍ ຍາມເວົ້າເຖິງການຍ້ອງຍໍ". ກະໂຕເພິ່ນເອງຍາມໃດກໍເປັນແວ່ນແຍງອັນໃສແຈ້ງ ໃຫ້ແກ່ນັກກອມມູນິດຫວຽດນາມໝົດທຸກຄົນ, ໃຫ້ແກ່ປະຊາຊົນຫວຽດນາມທຸກຖ້ວນໜ້າ ກ່ຽວກັບການເບິ່ງແຍງເອົາໃຈໃສ່ຜົນປະໂຫຍດຂອງສັງຄົມ, ດຶງດູດ ມະຫາຊົນໄປນຳຕົນ, ຈັດຕັ້ງຂະບວນແຂ່ງຂັນ, ສະໜັບສະໜູນອູ້ມຊູທຸກສິ່ງທີ່ກ້າວໜ້າ ແລະ ດີງາມ, ເປີດກວ້າງການຕຳໜິຕິຊົມ ແລະ ຕຳໜິຕົນເອງ, ຕໍ່ສູ້ເພື່ອປະຕິບັດວິໄນຢ່າງເຂັ້ມງວດ, ປຸກລະດົມຄວາມກະຕືລືລົ້ນຂອງມະຫາຊົນໃຫ້ສູງຂຶ້ນ ປຸກລະດົມບັນດາຊັ້ນຄົນຂອງປະຊາຊົນຢ່າງກວ້າງຂວາງໃຫ້ລຸກຂຶ້ນຕໍ່ຕ້ານສັດຕູ ຢ່າງເດັດຂາດ, ສ້າງວິລະກຳ ແລະ ອຸທິດຕົນເພື່ອອິດສະລະພາບ ແລະ ເອກະລາດຂອງຊາດ.

ໜຶ່ງໃນຈຳນວນຈຸດພິເສດອັນພົ້ນເດັ່ນທີ່ສຸດ ໃນນິໄສໃຈຄໍຂອງປະທານ ໂຮ່ຈີມິນ ແມ່ນຮັກແພງເຍົາວະຊົນຢ່າງບໍ່ມີຂອບເຂດ. ເພິ່ນເອງບໍ່ຮູ້ຈັກຄວາມສຸກໃນຊີວິດຄອບຄົວຢູ່ແລ້ວ ສະນັ້ນ ເພິ່ນຈຶ່ງຖ່າຍທອດຄວາມຮູ້ສຶກຂອງຜູ້ເປັນພໍ່ທີ່ເພິ່ນມີຢູ່ນັ້ນໃຫ້ແກ່ເດັກນ້ອຍຫວຽດນາມຫລາຍລ້ານຄົນ ຊຶ່ງເພິ່ນເອີ້ນເຂົາເຈົ້າຢ່າງຖະໜອມຮັກວ່າພວກຫລານ. ຜູ້ຄົນເຫັນເພິ່ນ ຖືກຫ້ອມລ້ອມດ້ວຍພວກນ້ອງນ້ອຍເຍົາວະຊົນ ຢູ່ໃນໂຮງຮຽນ, ວັງເຍົາ

ວະຊົນ, ໃນສະຫະກອນກະເສດຢູ່ເລື້ອຍໆ.

ຂ້າພະເຈົ້າຍັງຈື່ໄດ້ໃນຊຸມປີແຫ່ງສັນຕິພາບ ເມື່ອໂຮ່ຈີມິນ ເຂົ້າຮ່ວມງານລ້ຽງຢູ່ສະຖານທູດສະຫະພາບໂຊວຽດ ຫລັງຈາກພິທີທາງການອັນສຳຄັນແລ້ວ ເພິ່ນມັກ ເຕົ້າໂຮມເດັກນ້ອຍລູກຫລານຂອງນັກການທູດໂຊວຽດມາຢູ່ອ້ອມຂ້າງເພິ່ນ, ມ່ວນຊື່ນ ແຈກຢາຍເຂົ້າຫນົມໃຫ້ພວກເດັກນ້ອຍກິນ, ໄຕ່ຖາມກ່ຽວກັບການດຳລົງຊີວິດຂອງພວກຫລານຢູ່ຫວຽດນາມ, ເຮັດໃຫ້ໃຜໆກໍ່ຕົກຕະລຶງຕໍ່ການຮູ້ຈັກພາສາລັດເຊຍ ຂອງເພິ່ນ.

ຈົນຮອດມື້ສຸດທ້າຍຂອງຊີວິດ, ປະທານໂຮ່ຈີມິນ ຍັງຈົງຮັກພັກດີຕໍ່ຫລັກການ ອັນສູງສົ່ງຂອງລັດທິສາກົນກຳມາຊີບ ແລະ ສະແດງອອກເຖິງສາຍພົວພັນອັນຂາດບໍ່ໄດ້ແລະມີລັກສະນະສັດຈະວິພາກລະຫວ່າງລັກສະນະຊາດ ກັບລັກສະນະສາກົນ. ດ້ວຍຊີວິດ ທັງຫມົດ ແລະ ການເຄື່ອນໄຫວຂອງເພິ່ນ ປະທານໂຮ່ຈີມິນ ກໍຄືບັນດານັກຮົບຜູ້ລ້ຳເລີດອື່ນ ອື່ນ ທີ່ຕໍ່ສູ້ເພື່ອພາລະກິດຂອງກອມມູນິດ ໄດ້ຢັ້ງຢືນສັດຈະທຳອັນອຳມະຕະດັ່ງນີ້: ຜູ້ໃດຮັກຊາດ, ຮັກປະຊາຊົນຢ່າງດູດດື່ມນັ້ນ ກໍ່ບໍ່ມີຍາມໃດທີ່ລະຍົດຕໍ່ອຸດົມການຂອງນ້ຳໃຈສາມັກຄີສາກົນ,ແລະດ້ານຫນຶ່ງອີກ ມີແຕ່ຜູ້ທີ່ເດີນຕາມລັດທິສາກົນນິຍົມຢ່າງຫມັ້ນແກ່ນ ຫັ້ນລະ ຈຶ່ງເປັນຜູ້ຮັກຊາດທີ່ແທ້ຈິງ, ເຊິ່ງນຳເອົາຜົນປະໂຫຍດອັນໃຫຍ່ຫລວງ ມາໃຫ້ປະເທດຊາດ ແລະ ປະຊາຊົນຂອງຕົນ.

ໃນຖານະເປັນປະທານປະເທດ ແລະ ຜູ້ນຳພາພັກ, ໂຮ່ຈີມິນ ໄດ້ປະກອບສ່ວນອັນໃຫຍ່ຫລວງເຂົ້າໃນການຂະຫຍາຍສາຍພົວພັນຖານອ້າຍນ້ອງລະຫວ່າງຫວຽດນາມກັບປະເທດສັງຄົມນິຍົມ, ກັບຂະບວນການກອມມູນິດສາກົນ, ກັບກຳລັງປົດປ່ອຍຊາດ ຂອງຍຸກສະໄຫມ.

ໃນຖານະເປັນເພື່ອນມິດຜູ້ຍິ່ງໃຫຍ່ຂອງສະຫະພາບໂຊວຽດ, ເພິ່ນຈຶ່ງ ເຄົາລົບນັບຖື ທຸກສິ່ງທຸກຢ່າງທີ່ກ່ຽວພັນເຖິງການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່,ເຖິງ ວ.ອີ.ເລນິນ. ອາລົມຈິດດັ່ງກ່າວ ກຳເນີດເກີດຂຶ້ນຕັ້ງແຕ່ຊຸມປີທີ ໒໐ ເພິ່ນໄດ້ຮັກສາໄວ້ ໃນຕະຫລອດຊີວິດຂອງເພິ່ນ. ໃນບົດຫນັງສືພິມຕ່າງໆ, ບົດປາໄສຢູ່ກອງປະຊຸມໃຫຍ່ຕ່າງໆ ກອງປະຊຸມ, ງານໂຮມຊຸມນຸມ, ເພິ່ນກໍ່ອອກແຮງໂຄສະນາໃຫ້ແກ່ຜົນສຳເລັດ ຂອງສະຫະພາບໂຊວຽດ ຊຶ່ງເພິ່ນຖືເປັນ "ກຳແພງເພັດຂອງຂະບວນການປະຕິວັດ ແລະ ຂອງການຕໍ່ສູ້ເພື່ອສັນຕິພາບໃນທົ່ວໂລກ", ເປັນ "ປ້ອມຫມັ້ນອັນແຫນ້ນແກ່ນ ແລະເຂັ້ມແຂງທີ່ສຸດ ຂອງຄວາມກ້າວຫນ້າ ປະຊາທິປະໄຕ ແລະ ສັນຕິພາບ", ເປັນ "ຫລັກຖານອັນ

ມີຊີວິດຊີວາ ກ່ຽວກັບລັກສະນະດີເລີດ ຂອງລະບອບສັງຄົມນິຍົມທີ່ມີເຫນືອທຶນນິຍົມ". ເພິ່ນຮຽກຮ້ອງວ່າ: "ຕໍ່ຫນ້າສະພາບການທີ່ພວກຈັກກະພັດພວມຊອກຫາທຸກວິທີ ແກ່ຍາວການຄົງຕົວຂອງລະບອບທີ່ຫນ້າກຽດຊັງ ສຳລັບປະຊາຊາດ ແລະ ທີ່ຖືກສິ້ນຄອນນັ້ນພວກເຮົານັກປະຕິວັດຂອງທຸກໆປະເທດ ຈະຕ້ອງສຸມຫມົດເຫື່ອແຮງ ສຸມຫມົດຈິດຫມົດໃຈໃນແຕ່ລະວິນາທີ ແຕ່ລະວັນ ເພື່ອເພີ່ມທະວີຄວາມເປັນເອກະພາບຂອງພວກເຮົາອ້ອມຂ້າງສະຫະພາບໂຊວຽດ ແລະ ພັກກອມມູນິດສະຫະພາບໂຊວຽດຂຶ້ນກວ່າເກົ່າອີກ".

ຍາມໃດເພິ່ນກໍຖືສະຫະພາບໂຊວຽດເປັນເພື່ອນມິດ ຜູ້ທີ່ສະຫນິດສະຫນົມທີ່ສຸດ ແລະ ເປັນເພື່ອນຮ່ວມຮົບຂອງປະເທດຫວຽດນາມ ທີ່ດຳເນີນການຕໍ່ສູ້, ເປັນບ່ອນ ອີງອັນແຂງແກ່ນຂອງປະຊາຊົນຫວຽດນາມ ໃນການຕໍ່ສູ້ເພື່ອເອກະລາດ,ອິດສະຫລະພາບ. ຈົນຮອດບັ້ນທ້າຍຂອງຊີວິດ ເພິ່ນກໍເນັ້ນຫນັກ ຢູ່ຕະຫລອດໄປວ່າ ປະຊາຊົນຫວຽດນາມບໍ່ລືມຈັກເທື່ອວ່າ ທຸກໄຊຊະນະຂອງຕົນ ບໍ່ອາດຕັດແຍກອອກຈາກການຊ່ວຍເຫລືອອັນໃຫຍ່ຫລວງຂອງສະຫະພາບໂຊວຽດ.

ພາຍຫລັງ ໄຊຊະນະຂອງການປະຕິວັດຫວຽດນາມ, ປະທານໂຮ່ຈີມິນ ໄດ້ໄປຢ້ຽມຢາມສະຫະພາບໂຊວຽດຫລາຍຄັ້ງ ໃນຖານະປະທານປະເທດ ສາທາລະນະລັດປະຊາທິປະໄຕ ຫວຽດນາມ ແລະ ປະທານຄະນະບໍລິຫານງານສູນກາງພັກຄົນງານ ຫວຽດນາມ. ໃນປີ ໑໙໕໕ ເມື່ອສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ກ້າວຂຶ້ນ ບົນເສັ້ນທາງກໍ່ສ້າງເສດຖະກິດຢູ່ໃນສັນຕິພາບ, ເພິ່ນໄດ້ນຳພາຄະນະຜູ້ແທນລັດຖະບານໄປຢ້ຽມຢາມສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມອື່ນໆຢ່າງເປັນທາງການ. ໃນວາລະການຢ້ຽມຢາມ ທີ່ກາຍເປັນບຸນມິດຕະພາບໂຊວຽດ–ຫວຽດນາມ ສົນທິສັນຍາຫຼາຍສະບັບ ກ່ຽວກັບການຮ່ວມມືຫລາຍດ້ານລະຫວ່າງສະຫະພາບໂຊວຽດ ກັບຫວຽດນາມໄດ້ຮັບການເຊັນກັນ. ການຢ້ຽມຢາມຄັ້ງດັ່ງກ່າວ ກໍໄດ້ຮັດແຫນ້ນຄວາມສາມັກຄີສູ້ຮົບ ແລະ ມິດຕະພາບຖານອ້າຍນ້ອງ ຊຶ່ງປະຈຸບັນນີ້ ຜູກພັນປະຊາຊົນໂຊວຽດເຂົ້າກັບ ປະຊາຊົນ ຫວຽດນາມຢ່າງແຫນ້ນແກ່ນ.

ໃນຊຸມປີທີ ໔໐ ໂຮ່ຈີມິນ ໄຝ່ຝັນຢາກພົບ ວ.ອີ.ເລນິນ, ຢາກໄປຍັງຫ້ອງຮັດວຽກຂອງ ເລນິນ. ໄລຍະ ໑/໓ ຂອງສະຕະວັດຕໍ່ມາ, ປະທານໂຮ່ຈີມິນກໍເປັນຜູ້ຫນຶ່ງໃນຈຳນວນແຂກຕ່າງປະເທດຊຸດທຳອິດໄປຢ້ຽມຢາມຫໍພິພິດທະພັນ "ຫ້ອງຮັດວຽກ ແລະ ບ່ອນຢູ່ຂອງ ວ.ອີ.ເລນິນ" ທີ່ຫາກໍໄຂຂຶ້ນຢູ່ທີ່ວັງກະແລັມແລັງ. ໂຮ່ຈີມິນ ເປັນຜູ້

ທຳອິດທີ່ຂຽນຄຳເຫັນລົງໃນປຶ້ມສຳລັບແຂກຜູ້ມີກຽດຂອງຫໍພິພິດທະພັນ. ເພິ່ນບັນທຶກວ່າ: "ເລນິນ ເປັນອາຈານຜູ້ຍິ່ງໃຫຍ່ ຂອງການປະຕິວັດກຳມາຊີບ, ທັງເປັນຜູ້ທີ່ມີຄຸນນະທຳສູງທີ່ສຸດ, ເລນິນ ສອນໃຫ້ພວກເຮົາຮັກການອອກແຮງງານ, ປະຢັດ, ສັດຊື່, ທ່ຽງທຳ. ຄຳສັ່ງສອນຂອງ ເລນິນ ຈະຍືນຍົງຕະຫລອດການ".

ເມື່ອລາຈາກດິນແດນສະຫະພາບໂຊວຽດ ກ່ອນກ້າວຂຶ້ນຂັ້ນໄດເຄື່ອງບິນ ເພິ່ນໄດ້ກ່າວຄຳປາໄສເປັນພາສາລັດເຊຍ ແຕ່ເປັນຄຳເວົ້າທີ່ອົບອຸ່ນວ່າ:

"ພວກຂ້າພະເຈົ້າກັບຄືນປະເທດຊາດ ໂດຍນຳເອົາຄວາມຮັກແພງ ແລະນ້ຳໃຈມິດຕະພາບຖານອ້າຍນ້ອງ ຂອງປະຊາຊົນສະຫະພາບໂຊວຽດໄປດ້ວຍ. ເຖິງວ່າ ຫວຽດນາມ ແລະ ສະຫະພາບໂຊວຽດຫ່າງໄກກັນຫລາຍພັນຫລັກ ແຕ່ຫມາກຫົວໃຈ ຂອງພວກເຮົາ ຍາມໃດກໍ່ຢູ່ຄຽງຂ້າງກັນ ແລະ ເຕັ້ນເປັນຈັງຫວະດຽວກັນ."

ຊຸມປີຕໍ່ຈາກນັ້ນມາ ເພິ່ນໄດ້ນຳພາຄະນະຜູ້ແທນພັກ, ລັດຖະບານຫວຽດນາມໄປຢ້ຽມຢາມສະຫະພາບໂຊວຽດອີກຫລາຍຄັ້ງ, ໄປຮ່ວມພິທີລະນຶກ ວັນຄົບຮອບມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ທີ່ມົດສະກູ, ໄປຮ່ວມກອງປະຊຸມໃຫຍ່ຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ, ໄປຮ່ວມກອງປະຊຸມຜູ້ຕາງຫນ້າຂອງພັກກອມມູນິດ ແລະ ກຳມະກອນປີ ໑໙໕໗ ແລະ ປີ ໑໙໖໐ ກໍ່ຄືຫລາຍໆຄັ້ງ ໄດ້ໄປພັກຜ່ອນຢູ່ສະຫະພາບໂຊວຽດ.

ຍາມໃດປະທານໂຮ່ຈີມິນ ກໍ່ມັກເວົ້າເຖິງຄວາມສາມັກຄີສາກົນຢູ່ເລື້ອຍໆ ໃນບົດປາໄສ, ບົດປະກອບຄວາມເຫັນ ແລະ ໃນບົດຂຽນຂອງເພິ່ນ.

ຫນຶ່ງໃນຈຳນວນບົດຂຽນໃຫຍ່ໆ ຄັ້ງສຸດທ້າຍຂອງເພິ່ນ ແມ່ນບົດຂຽນທີ່ລົງພິມໃນຫນັງສືພິມ "ປະຣາວະດາ" ເນື່ອງໃນໂອກາດພິທີລະນຶກການປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຍ່ຄົບຮອບ ໕໐ ປີ. ແຕ່ລະແຖວຂອງບົດຂຽນ ລ້ວນແຕ່ເຕັມໄປດ້ວຍມິດຕະພາບ ແລະ ຄວາມຮັກແພງຖານອ້າຍນ້ອງ ອັນອົບອຸ່ນເລິກເຊິ່ງຂອງລູກຮັກຫລານ ປະເສີດ ທີ່ຍິ່ງໃຫຍ່ຂອງຫວຽດນາມ, ຂອງປະຊາຊົນຫວຽດນາມທຸກຖ້ວນຫນ້າ ມີຕໍ່ປະເທດໂຊວຽດ. ເພິ່ນຂຽນວ່າ: "ໃນເວລາທີ່ປະຊາຊົນຫວຽດນາມດຳເນີນການຕໍ່ສູ້ ຕ້ານອາເມລິກາ ເພື່ອກູ້ຊາດ, ທັງມີຄວາມຕັດສິນໃຈອັນເດັດດ່ຽວທີ່ຈະຕີຊະນະອາເມລິກາຜູ້ຮຸກຮານ ແລະ ກໍ່ສ້າງສັງຄົມນິຍົມບົນດິນແດນຂອງຕົນນັ້ນ ດ້ວຍຄວາມຮູ້ບຸນຄຸນແລະ ຄວາມເຊື່ອຫມັ້ນ ປະຊາຊົນຫວຽດນາມອວຍຫນ້າໄປຫາສະຫະພາບໂຊວຽດບ້ານເກີດເມືອງນອນຂອງ ເລນິນ ຜູ້ຍິ່ງໃຫຍ່ ແລະ ຂອງການປະຕິວັດເດືອນຕຸລາ ທີ່ມີກຽດສະຫງ່າ.

...ໂດຍເດີນຕາມເສັ້ນທາງທີ່ ເລນິນ ວາງອອກ, ຕາມເສັ້ນທາງ ຂອງການປະຕິວັດເດືອນຕຸລານັ້ນ ປະຊາຊົນຫວຽດນາມ ຍາດເອົາໄຊຊະນະອັນໃຫຍ່ຫລວງ ທີ່ສຸດມາໄດ້. ຍ້ອນແນວນັ້ນເອງ ປະຊາຊົນຫວຽດນາມຈຶ່ງມີຄວາມຮູ້ສຶກ ຮູ້ບຸນຄຸນ ແລະຂອບໃຈອັນເລິກເຊິ່ງດີແນວນີ້ ຕໍ່ການປະຕິວັດເດືອນຕຸລາອັນສະຫງ່າລາສີ, ຕໍ່ ເລນິນ ຜູ້ຍິ່ງໃຫຍ່ ແລະ ຕໍ່ປະຊາຊົນຂອງສະຫະພາບໂຊວຽດ".

ພັກກອມມູນິດສະຫະພາບໂຊວຽດ ປະຊາຊົນໂຊວຽດທັງໝົດ ໄດ້ຕອບຮັບຄວາມຮັກແພງ ແລະ ຄວາມເຄົາລົບນັບຖືຂອງປະທານໂຮ່ຈີມິນ ຢ່າງບໍ່ປ່ຽນແປງ. ເພິ່ນເປັນນັກປະຕິວັດຜູ້ດີເດັ່ນ, ເປັນນັກເຄື່ອນໄຫວຜູ້ລ້ຳເລີດ ໃນຂະບວນການກອມມູນິດ ສາກົນ ແລະ ຂະບວນການປົດປ່ອຍຊາດ, ເປັນນັກມາກຊິດ-ເລນິນິດ ຜູ້ໜັກແໜ້ນ, ເປັນນັກຮົບຜູ້ສູດກົກສູດປາຍ ທີ່ຕໍ່ສູ້ເພື່ອສັງຄົມນິຍົມ, ເປັນເພື່ອນຜູ້ຈິງຮັກພັກດີຂອງປະຊາຊົນໂຊວຽດ, ພັກກອມມູນິດແຫ່ງສະຫະພາບໂຊວຽດໄດ້ຕີລາຄາການເຄື່ອນໄຫວອັນດີເດັ່ນຂອງປະທານໂຮ່ຈີມິນດີແນວນັ້ນ.

ຊື່ສຽງ ແລະ ພາລະກິດຂອງເພິ່ນ ຍືນຍົງຕະຫລອດການ

໑

ຕອນຄ່ຳວັນທີ ໑ ເດືອນກັນຍາ ປີ ໑໙໖໙ ຄືດັ່ງປົກກະຕິມາ ງານໂຮມຊຸມນຸມ ອັນຄຶກຄື້ນຂອງມະຫາຊົນຂອງນະຄອນຫລວງ ເນື່ອງໃນໂອກາດລະນຶກວັນຊາດ ຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄຂຂຶ້ນຢູ່ຫໍປະຊຸມ ທີ່ຕັ້ງຢູ່ໃນສະໜາມຫຼວງບາດິງ. ແຕ່ຜູ້ທີ່ມາຮ່ວມລ້ວນແຕ່ສະແດງອາການບໍ່ມ່ວນຊື່ນເບີກບານ, ມີສີໜ້າໂສກເສົ້າ. ໃນໄລຍະຫລາຍປີຜ່ານມາ ນີ້ເປັນຄັ້ງທຳອິດທີ່ບ່ອນນັ່ງທີ່ເປັນ ຂອງປະທານໂຮ່ຈີມິນ ເທິງເວທີ ຄະນະປະທານແມ່ນວ່າງເປົ່າ.

ເຖິງວ່າຫ້ອງການທຳນຽບປະທານປະເທດ ຍັງບໍ່ທັນແຈ້ງຂ່າວ ຢ່າງເປັນທາງການ, ແຕ່ໃນເຊົ້າມື້ນັ້ນທົ່ວນະຄອນຫລວງຮ່າໂນ້ຍ ໄດ້ກະຈາຍຂ່າວໄປ ຢ່າງໄວວາວ່າ ປະທານ ໂຮ່ຈີມິນ ເຈັບໜັກ.

ສອງມື້ຕໍ່ມາ ປະທານໂຮ່ຈີມິນກໍ່ເຖິງແກ່ກຳ.

ມີຄົນເລົ່າວ່າ ເມື່ອຟື້ນສະຕິຄືນເທື່ອສຸດທ້າຍ ປະທານໂຮ່ຈີມິນ ຖາມວ່າ:

"ສະພາບການຢູ່ພາກໃຕ້ເປັນແນວໃດ? ວັນຊາດປີນີ້ຈະມີການຍິງບັ້ງໄຟດອກ ຢູ່ຮ່າໂນ້ຍບໍ "

ກ່ອນສິ້ນລົມຫາຍໃຈ ປະທານໂຮ່ຈີມິນ ໄດ້ຂຽນພິໄນກຳ ປະໄວ້ໃຫ້ທົ່ວພັກທົ່ວປວງຊົນ. ພິໄນກຳບັນຈຸຈິດໃຈສູ້ຊະຫັດນິຍົມປະຕິວັດ ແລະ ຄວາມເຊື່ອໝັ້ນຕໍ່ອະນາຄົດອັນສົດໃສຂອງຫວຽດນາມ.

ຕອນໜຶ່ງຂອງພິໄນກຳຂຽນວ່າ "ສົງຄາມຕໍ່ຕ້ານການຮຸກຮານ ຂອງອາເມລິກາອາດຈະແກ່ຍາວຫລາຍປີ. ພີ່ນ້ອງຮ່ວມຊາດອາດຈະເສຍວັດຖຸສິ່ງຂອງ ແລະຄົນຈຳນວນຫລາຍ. ເຖິງຢ່າງໃດກໍຕາມ ພວກເຮົາຕ້ອງຕັດສິນໃຈຕີອາເມລິກາທີ່ເປັນສັດຕູ ໄປຈົນເຖິງໄຊຊະນະອັນສົມບູນ.

ເຖິງແມ່ນຈະຫຍຸ້ງຍາກລຳບາກປານໃດ ປະຊາຊົນເຮົາເດັດຂາດ ຈະມີໄຊຊະນະອັນສົມບູນ. ຈັກກະພັດອາເມລິກາເດັດຂາດ ຕ້ອງປົບໜີອອກຈາກປະເທດເຮົາ.ປະເທດຊາດເຮົາເດັດຂາດຈະເປັນເອກະພາບ, ພີ່ນ້ອງຮ່ວມຊາດໃຕ້-ເໜືອ ເດັດຂາດຈະຖືກເຕົ້າໂຮມຢູ່ໃນເຮືອນດຽວກັນ".

ປະທານໂຮ່ຈີມິນ ເປັນຫ່ວງເປັນໃຍນຳອີກບັນຫາໜຶ່ງວ່າ ຫລັງຈາກເພິ່ນ ສິ້ນຊີວິດແລ້ວເຮັດແນວໃດພັກຄົນງານຫວຽດນາມຈຶ່ງຈະຍັງຄົງເປັນກອງລະວັງໜ້າທີ່ມີປະສົບການຂອງປະຊາຊົນຫວຽດນາມ, ຍົກສູງລັດທິຂອງລັດທິມາກ-ເລນິນ ຕະຫລອດການ, ສືບຕໍ່ນຳພາປະຊາຊົນກ້າວຈາກໄຊຊະນະນີ້ ໄປສູ່ໄຊຊະນະໃໝ່. ເພິ່ນຂຽນໄວ້ໃນພິໄນກຳວ່າ:

"ຄວາມສາມັກຄີ ແມ່ນມູນເຊື້ອອັນປະເສີດຍິ່ງຂອງພັກ ແລະ ປະຊາຊົນເຮົາ . ບັນດາສະຫາຍແຕ່ສູນກາງເຖິງໜ່ວຍພັກ ຕ້ອງຮັກສາຄວາມສາມັກຄີ ແລະ ຄວາມເປັນເອກະພາບຂອງພັກໄວ້ຄືດັ່ງຮັກສາແກ້ວຕາຂອງຕົນ...

ພັກເຮົາແມ່ນພັກກຳອຳນາດ. ສະມາຊິກພັກ ແລະ ພະນັກງານແຕ່ລະຄົນ ຕ້ອງເຊື່ອມຊຶມຄຸນສົມບັດປະຕິວັດຢ່າງແທ້ຈິງ ທັງຕ້ອງເປັນຄົນດຸໝັ່ນ, ປະຢັດມັດທະຍັດ,ສັດຊື່, ທ່ຽງທຳ, ບໍ່ເຫັນແກ່ຕົວຢ່າງແທ້ຈິງ. ຕ້ອງຮັກສາພັກເຮົາໃຫ້ປອດໃສທີ່ສຸດ, ຕ້ອງໃຫ້ສົມກັບວ່າເປັນຜູ້ນຳພາ, ເປັນຜູ້ຮັບໃຊ້ ຜູ້ບໍລິສຸດຜຸດຜ່ອງທີ່ສຸດຂອງປະຊາຊົນ".

ໃນໄລຍະນີ້ ມວນມະນຸດທັງໝົດທີ່ກ້າວໜ້າໄດ້ສະແດງ ຄວາມເສົ້າສະຫລົດໃຈອັນເລິກເຊິ່ງ ຕໍ່ການມໍລະນະກຳຂອງປະທານໂຮ່ຈີມິນ. ພິທີໄວ້ອາໄລ ໄດ້ຖືກຈັດຕັ້ງຂຶ້ນ

ຢູ່ທົ່ວທຸກບ່ອນໃນຂອບເຂດທົ່ວໂລກ ເພື່ອລະນຶກເຖິງລູກຫລານຜູ້ຍິ່ງໃຫຍ່ຂອງຊາດຫວຽດນາມ. ໂທລະເລກ ແລະ ສານສະແດງຄວາມເສົ້າສະຫລົດໃຈ ໒໒ ພັນກວ່າ ສະບັບຈາກ ໑໒໑ ປະເທດຖືກສົ່ງໄປຍັງຮ່າໂນ້ຍ ນະຄອນຫລວງຂອງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ໃນນາມຂອງຜູ້ນຳປະເທດ ແລະ ລັດຖະບານ, ໃນນາມຜູ້ນຳຂອງພັກກອມມູນິດ ແລະ ກຳມະກອນ, ຂະບວນການປົດປ່ອຍຊາດ, ອົງການຈັດຕັ້ງມະຫາຊົນ ປະຊາທິປະໄຕ, ນັກຮົບປະຕິວັດຜູ້ອາວຸໂສຂອງຂະບວນການປະຕິວັດໂລກ , ນັກເຄື່ອນໄຫວສັງຄົມທີ່ມີຊື່ສຽງ.

ໃນສານຂອງຄະນະບໍລິຫານງານ ສູນກາງ ພັກກອມມູນິດສະຫະພາບໂຊວຽດ ຄະນະປະທານສະພາໂຊວຽດສູງສຸດ ແຫ່ງສະຫະພາບໂຊວຽດ ແລະ ສະພາລັດຖະມົນຕີ ແຫ່ງສະຫະພາບໂຊວຽດ ເຊິ່ງສົ່ງເຖິງຜູ້ນຳພັກຄົນງານຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ມີຕອນຫນຶ່ງທີ່ກ່າວວ່າ: "ລູກຫລານຜູ້ຍິ່ງໃຫຍ່ ຂອງ ປະຊາຊົນຫວຽດນາມ ຜູ້ພິລະອາດຫານ ນັກເຄື່ອນໄຫວຜູ້ເລີດລ້ຳຂອງຂະບວນການກອມມູນິດສາກົນ ແລະ ປົດປ່ອຍຊາດ ເພື່ອນມິດຜູ້ຍິ່ງໃຫຍ່ຂອງປະຊາຊົນໂຊວຽດ ໄດ້ເຖິງແກ່ກຳ.

ສະຫາຍໂຮ່ຈີມິນ ໄດ້ອຸທິດຊີວິດອັນສະຫງ່າລາສີທັງຫມົດຂອງຕົນ ຄວາມຮູ້ຄວາມສາມາດທັງຫມົດຂອງນັກປະຕິວັດຜູ້ຫນຶ່ງ ໃຫ້ແກ່ພາລະກິດຕໍ່ສູ້ ເພື່ອອະນາຄົດອັນສົດໃສຂອງປະຊາຊົນປະເທດຕົນ ເພື່ອໄຊຊະນະອັນສົມບູນ ຂອງລັດທິມາກ-ເລນິນ. ການປະກອບສ່ວນຂອງເພິ່ນມີຄ່າຈົນຫາອັນປຽບບໍ່ໄດ້, ສຳລັບການສ້າງຕັ້ງພັກຄົນງານຫວຽດນາມ ບົນພື້ນຖານຫລັກການຂອງລັດທິ ມາກ-ເລນິນ ອັນເປັນອົງການນຳຂອງປະຊາຊົນຫວຽດນາມໃນການຕໍ່ສູ້ປົດປ່ອຍ ແລະ ກໍ່ສ້າງສັງຄົມນິຍົມ. ພາຍໃຕ້ການນຳພາຂອງເພິ່ນ ການປະຕິວັດເດືອນສິງຫາ ຈຶ່ງປະກົດເປັນຈິງ. ໃນແປວໄຟ ຂອງການປະຕິວັດດັ່ງກ່າວ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເຊິ່ງເປັນລັດສັງຄົມນິຍົມທຳອິດຢູ່ໃນອາຊີອາຄະເນ ໄດ້ກຳເນີດເກີດຂຶ້ນ. ໂດຍໄດ້ຮັບການປຸກລະດົມຈາກສະຫາຍ ໂຮ່ຈີມິນ ປະຊາຊົນຫວຽດນາມ ໄດ້ຕໍ່ຕ້ານຢ່າງບັງອາດກັບການຮຸກຮານ ຂອງພວກຈັກກະພັດ ທີ່ມີຕໍ່ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ໄດ້ແຜ່ຂະຫຍາຍການຕໍ່ສູ້ຢ່າງແຂງແຮງ ຕ້ານກັບການແຊກແຊງຂອງພວກອາເມລິກາ ແລະ ພັນທະມິດຂອງພວກເຂົາ ເພື່ອປົດປ່ອຍພາກໃຕ້.

ພະລັງອັນຟົດຟື້ນ, ມານະຈິດອັນແຂງແກ່ນ, ນ້ຳໃຈພິລະອາດຫານ ອັນບໍ່ເຫືອດແຫ້ງຂອງສະຫາຍໂຮ່ຈີ້ມິນ ພ້ອມດ້ວຍຄວາມງ່າຍດາຍ ແລະ ມະນຸດສະທຳຂອງເພິ່ນໄດ້ເຮັດໃຫ້ປະຊາຊົນຫວຽດນາມ ປະຊາຊົນໂຊວຽດ ນັກກອມມູນິດ ແລະ ຜູ້ກ້າວໜ້າໃນໂລກ ເຄົາລົບນັບຖື ແລະ ຮັກແພງເພິ່ນຢ່າງເລິກເຊິ່ງ.

ບັນດານັກກອມມູນິດແຫ່ງສະຫະພາບໂຊວຽດ ກໍຄືປະຊາຊົນໂຊວຽດທຸກທົ່ວໜ້າຕີລາຄາສູງຕໍ່ການອອກເຫື່ອເຫແຮງຢ່າງບໍ່ຮູ້ອິດເມື່ອຍ ຂອງສະຫາຍ ໂຮ່ຈີ້ມິນ ເພື່ອຈູດປະສົງຢາກເສີມຂະຫຍາຍມິດຕະພາບຖານອ້າຍນ້ອງ ລະຫວ່າງພັກລົ້ມງານ ຫວຽດນາມກັບ ພັກກອມມູນິດແຫ່ງສະຫະພາບໂຊວຽດ, ລະຫວ່າງປະຊາຊົນໂຊວຽດ ກັບ ປະຊາຊົນຫວຽດນາມ. ຍາມໃດປະຊາຊົນໂຊວຽດກໍລະນຶກເຖິງໂຮ່ຈີ້ມິນ ໃນຖານະທີ່ເພິ່ນເປັນນັກມາກຊິດ-ເລນິນິດ ຜູ້ໜັກແໜ້ນ ເພື່ອນຜູ້ຊື່ສັດບໍລິສຸດຂອງພັກ ແລະ ປະເທດໂຊວຽດ ".

ພິທີສົ່ງສະການສະຫາຍໂຮ່ຈີ້ມິນ ປະທານຄະນະບໍລິຫານງານ ສູນກາງ ພັກລົ້ມງານຫວຽດນາມ ປະທານສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ຈັດຂຶ້ນໃນວັນທີ ៩ ເດືອນກັນຍາ ປີ ໑໙໖໙ ຢູ່ທີ່ຮ່າໂນ້ຍ ແລະ ໄດ້ກາຍເປັນການສະແດງ ອອກຄັ້ງໃຫຍ່ເຖິງຄວາມນັບຖືຮັກແພງຂອງປະຊາຊົນຫວຽດນາມຕໍ່ຜູ້ນຳແລະ ອາຈານຂອງຕົນເຖິງຄວາມຈົງຮັກພັກດີ ຢ່າງເລິກເຊິ່ງຂອງປະຊາຊົນຫວຽດນາມ ຕໍ່ອຸດົມການຂອງລັດທິກອມມູນິດ.

ໃນເມື່ອກ່າວຄຳໄວ້ອາໄລ ສະຫາຍ ເລຢວນ ເລຂາທິການຜູ້ທີໜຶ່ງ ຄະນະບໍລິຫານງານ ສູນກາງ ພັກລົ້ມງານຫວຽດນາມ ໄດ້ເວົ້າວ່າ: "ຊາດເຮົາ ແລະ ພັກເຮົາສູນເສຍຜູ້ນຳທີ່ປີຊາສາມາດ ແລະ ອາຈານຜູ້ຍິ່ງໃຫຍ່ຜູ້ໜຶ່ງໄປແລ້ວ. ຂະບວນການກອມມູນິດສາກົນ, ຂະບວນການປົດປ່ອຍຊາດ ແລະ ມວນມະນຸດທີ່ກ້າວໜ້າໃນໂລກສູນເສຍນັກຮົບຮູລ້ຳເລີດ, ເພື່ອນຮ່ວມຮົບທີ່ທໍລະຫົດອົດທົນ ແລະ ສະໜິດສະໜົມຜູ້ໜຶ່ງ...

ໃນການຈາກກັນ ພວກເຮົາຂໍປະຕິຍານວ່າ:

ຈະເຊີດຊູລັນທຸງເອກະລາດແຫ່ງຊາດ ແລະ ລັນທຸງແຫ່ງການຕໍ່ສູ້ຢ່າງເດັດດ່ຽວເພື່ອຕີຊະນະພວກອາເມລິກາຜູ້ຮຸກຮານຕະຫລອດໄປ,ປົດປ່ອຍພາກໃຕ້, ປົກປັກຮັກສາພາກເໜືອ, ທ້ອນໂຮມປະເທດຊາດ ໃຫ້ເປັນເອກະພາບກັນ ເພື່ອເຮັດໃຫ້ຄວາມຝັນ

ຂອງເພິ່ນເປັນຄວາມຈິງ.

ໃນການຈາກກັນ ພວກເຮົາຂໍປະຕິຍານວ່າ:

ຈະອຸທິດກຳລັງແຮງທັງໝົດ ໃຫ້ແກ່ການສືບຕໍ່ຕໍ່ສູ້ ເພື່ອປະຕິບັດອຸດົມການສັງຄົມນິຍົມ ແລະ ກອມມູນິດນິຍົມອັນສູງສົ່ງຈົບງາມ ຊຶ່ງເພິ່ນໄດ້ປະໃຫ້ເປັນມູນມໍລະດົກ ແກ່ຊົນຊັ້ນກຳມະກອນ ແລະ ປະຊາຊົນເຮົາ, ເພື່ອເຮັດໃຫ້ປະເທດຊາດມີຄວາມວັດທະນາຖາວອນ ແລະ ນຳເອົາຄວາມຜາສຸກ ມາໃຫ້ພີ່ນ້ອງຮ່ວມຊາດ".

ໃນວັນທີ ໒໙ ເດືອນພະຈິກ ປີ ໑໙໖໙ ໃນວາລະປະຊຸມສະໄໝວິສາມັນ ກົມການເມືອງ ສູນກາງ ພັກຄົນງານຫວຽດນາມ ໄດ້ຜ່ານມະຕິຕົກລົງຮັກສາສົບປະທານໂຮ່ຈີມິນ ໄວ້ ແລະ ກໍ່ສ້າງສຸສານຂອງເພິ່ນຂຶ້ນທີ່ສະໜາມຫລວງ ບາດິງ.

ນີ້ເປັນກິດຈະການກໍ່ສ້າງຂອງທົ່ວປວງຊົນ. ແຂວງ, ເມືອງ, ໂຮງງານ ສຳນັກງານອົງການ ກອງທະຫານໄດ້ສົ່ງຜູ້ເຮັດວຽກດີເດັ່ນ, ບັນດາໜ່ວຍກໍ່ສ້າງທີ່ເກັ່ງ ທີ່ສຸດຂອງຕົນ ມາຍັງກິດຈະການກໍ່ສ້າງສຸສານປະທານໂຮ່ຈີມິນ. ສອງສາມປີຕໍ່ມາ ສຸສານໄດ້ຖືກສ້າງຂຶ້ນມະສະຖານທີ່ ຊຶ່ງໃນຕອນເຊົ້າຂອງເດືອນກັນຍາອັນອົບອຸ່ນຂອງປີ ໑໙໔໕ ປະທານໂຮ່ຈີມິນໄດ້ອ່ານຖະແຫລງການເອກະລາດ, ທີ່ປ່າວປະກາດເຖິງການ ກຳເນີດເກີດຂຶ້ນຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມ.

ໃນວັນທີ ໒໙ ເດືອນສິງຫາ ປີ ໑໙໗໕ ພິທີໄຂສຸສານໄດ້ຮັບການຈັດຕັ້ງຂຶ້ນຢ່າງຄຶກຄື້ນ. ຄະນະຜູ້ແທນພັກ ແລະ ລັດຖະບານຂອງສະຫະພາບໂຊວຽດຖືກເຊີນເຂົ້າຮ່ວມໃນນາມເປັນຕົວແທນຂອງປະເທດ ທີ່ໄດ້ສົ່ງນັກຊ່ຽວຊານຜູ້ຊຳນານຂອງຕົນ ໄປຊ່ວຍປະຊາຊົນຫວຽດນາມ ເກັບຮັກສາສົບປະທານ ໂຮ່ຈີມິນ ແລະ ກໍ່ສ້າງສຸສານ ຕາມຄວາມຕ້ອງການຂອງຄະນະບໍລິຫານງານສູນກາງ ພັກຄົນງານຫວຽດນາມ. ສະຫາຍ ເລຢວນ ໄດ້ເອີ້ນສຸສານໂຮ່ຈີມິນ ເປັນ "ສັນຍາລັກອັນຈະແຈ້ງທີ່ສະແດງເຖິງມິດຕະພາບອັນໝັ້ນຄົງຂະໜົງແກ່ນຕະຫລອດໄປ ລະຫວ່າງສະຫະພາບໂຊວຽດ ກັບຫວຽດນາມ".

໒

ປະທານໂຮ່ຈີມິນ ບໍ່ໄດ້ມີຊີວິດຢູ່ຈົນຮອດມື້ປະຫວັດສາດຂອງຊາດຕົນ ຄືມື້ປົດປ່ອຍ

ພາກໃຕ້ຫວຽດນາມ ຢ່າງສົມບູນ ແລະ ທົ່ວປະເທດໂຮມກັນເຂົ້າເປັນເອກະພາບ ບົນພື້ນຖານສັງຄົມນິຍົມ. ແຕ່ວ່າ ຍາມໃດເພິ່ນກໍເຊື່ອໝັ້ນວ່າວັນດັ່ງກ່າວຈະຕ້ອງມາຮອດ. ເພິ່ນໄດ້ມ້ວນທ້າຍບົດພິໄນກຳດ້ວຍຄຳເວົ້າດັ່ງຕໍ່ໄປນີ້: "ຄວາມມຸ່ງມາດປາຖະໜາ ອັນສຸດທ້າຍຂອງຂ້າພະເຈົ້າແມ່ນ ຂໍໃຫ້ທົ່ວພັກ ທົ່ວປວງຊົນເຮົາຈົ່ງສາມັກຄີກັນເຂົ້າ ເພື່ອຕໍ່ສູ້ ກໍ່ສ້າງປະເທດຫວຽດນາມສັນຕິພາບ ເອກະພາບ ເອກະລາດ ປະຊາທິປະໄຕ ແລະ ວັດທະນາຖາວອນ, ຈົ່ງປະກອບສ່ວນອັນມີກຽດເຂົ້າໃນພາລະກິດປະຕິວັດໂລກ".

ຄຳເວົ້າດັ່ງກ່າວຂອງເພິ່ນ ໄດ້ກາຍເປັນເຂັມຊີ້ທິດ ໃຫ້ແກ່ການກະທຳ ຂອງເພື່ອນຮ່ວມຮົບຂອງເພິ່ນໃນພັກ, ຂອງພີ່ນ້ອງຮ່ວມຊາດພາກໃຕ້ຜູ້ຮັກຊາດ ແລະ ປະຊາຊົນຫວຽດນາມຜູ້ພິລະອາດຫານທຸກຖ້ວນໜ້າ. ວັນທີ ໓໐ ເດືອນ ເມສາ ປີ ໑໙໗໕ ຜືນທຸງສີແດງດາວຄຳ ໄດ້ປິວສະບັດຢູ່ໃນຕົວເມືອງໄຊງ່ອນ ບ່ອນທີ່ໃນຫລາຍປີມານີ້ ໄດ້ກາຍເປັນເຮືອນຮັງຂອງລະບອບລ່າເມືອງຂຶ້ນແບບໃໝ່ຕ້ານປະຊາຊົນ. ນັ້ນ ພາລະກິດປົດປ່ອຍພາກໃຕ້ຫວຽດນາມ ໄດ້ສິ້ນສຸດລົງດ້ວຍໄຊຊະນະ, ການປະຕິວັດ ປົດປ່ອຍຊາດ ໄດ້ຮັບໄຊຊະນະຢ່າງສົມບູນ ແລະ ຄົບຖ້ວນໃນທົ່ວປະເທດ.

ໃນວັນທີ ໒ ເດືອນກໍລະກົດປີ ໑໙໗໖ ວາລະປະຊຸມຄັ້ງທີໜຶ່ງ ຂອງສະພາແຫ່ງຊາດຫວຽດນາມເອກະພາບ ທີ່ມາຈາກການເລືອກຕັ້ງທົ່ວໄປໃນທົ່ວປະເທດ ໄດ້ຮັບຮອງເອົາມະຕິຄັ້ງປະຫວັດສາດທີ່ ປະກາດສ້າງຕັ້ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ. ພາລະກິດອັນຍິ່ງໃຫຍ່ ຊຶ່ງປະທານໂຮ່ຈີມິນ ໄດ້ອຸທິດໝົດຊີວິດຂອງເພິ່ນ ໃຫ້ນັ້ນ ແມ່ນການກໍ່ສ້າງປະເທດຫວຽດນາມສັງຄົມນິຍົມເອກະພາບ ຈົນສຳເລັດຜົນ.

ປະຊາຊົນຫວຽດນາມ ປະຊາຊົນບັນດາປະເທດໃນວົງຄະນະຍາດສັງຄົມນິຍົມ ກໍຄືຂະບວນການກອມມູນິດ ແລະ ຂະບວນການປົດປ່ອຍຊາດໃນທົ່ວໂລກ ລະນຶກເຖິງປະທານໂຮ່ຈີມິນ ດ້ວຍຄວາມເຄົາລົບນັບຖືຢ່າງສູງ. ຊູ່ມນີ້ ໜຶ່ງໃນບັນດາຕົວເມືອງໃຫຍ່ຂອງຂົງເຂດອາຊີ ອາຄະເນ ຄືນະຄອນໄຊ່ງ່ອນໄດ້ໃສ່ຊື່ຂອງເພິ່ນ. ອົງການຈັດຕັ້ງຂອງຊາວໜຸ່ມກອມມູນິດ ເຢົາວະຊົນ ແລະ ອະນຸຊົນ ຢູ່ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກໍໄດ້ຮັບກຽດໃສ່ຊື່ຂອງລຸງ. ຢູ່ຮ່າໂນ້ຍ, ຢູ່ບ້ານເກີດຂອງເພິ່ນ ກໍຄືໃນແຫ່ງຕ່າງໆ ຊຶ່ງເພິ່ນເຄີຍໄດ້ໃຊ້ຊີວິດຢູ່ ແລະ ເຮັດວຽກ ລ້ວນແຕ່ໄດ້ກໍ່ສ້າງຫໍພິພິດທະພັນໄວ້ເປັນອະນຸສອນ. ຊື່ຂອງໂຮ່ຈີມິນ ກໍຍັງຕັ້ງໃຫ້ເປັນຊື່ຂອງສະໜາມແຫ່ງໜຶ່ງຂອງມົດສະກູ, ໃຫ້ແກ່ໂຮງຮຽນຂັ້ນສູງຢູ່ອີກູດ, ຖະໜົນສາຍໜຶ່ງຢູ່ນະຄອນຫລວງ ສາທາ

ລະບະລັດ ປະຊາທິປະໄຕ ເຢຍລະມັນ, ຢູໂກຊະລາວີ, ປະເທດອື່ນໆອີກຫລາຍປະເທດ. ກຳປັ່ນເດີນທາງໄກຂອງໂຊວຽດທີ່ໃສ່ຊື່ "ໂຮ່ຈີມິນ" ແມ່ນມີໜ້າເປັນປະຈຳ ຢູ່ໃນທ່າເຮືອຕ່າງໆຂອງຫວຽດນາມ.

ສິ່ງທີ່ເປັນອະນຸສອນອັນຍິ່ງໃຫຍ່ ເພື່ອລະນຶກເຖິງປະທານໂຮ່ຈີມິນ ແມ່ນໄຊຊະນະອັນເປັນປະຫວັດການຂອງປະຊາຊົນອິນດູຈີນ ທີ່ຍາດມາໄດ້ ນັ້ນຄື ປະເທດຫວຽດນາມໄດ້ເຕົ້າໂຮມກັນເປັນເອກະພາບພື້ນຖານສັງຄົມນິຍົມ, ປະເທດລາວໄດ້ ຮັບໄຊຊະນະໃນການປະຕິວັດຊາດ-ປະຊາທິປະໄຕ ແລະ ກ້າວຂຶ້ນເສັ້ນທາງກໍ່ສ້າງສັງຄົມນິຍົມ, ປະຊາຊົນກຳປູເຈຍ ໄດ້ຮັບໄຊຊະນະຢູ່ໃນການປະຕິວັດ ແລະ ທັບມ້າງ ລະບອບໂປນປົດ ເປື້ອນເລືອດ, ສ້າງເງື່ອນໄຂໃຫ້ແກ່ປະຊາຊົນກຳປູເຈຍຟື້ນຟູກໍ່ສ້າງຊີວິດໃໝ່ຂອງຕົນ.

ໜຶ່ງໃນຈຳນວນໝາກຜົນ ອັນສຳຄັນຍິ່ງຂອງໄຊຊະນະເຫລົ່ານັ້ນ ແມ່ນການປັບປຸງສາຍສຳພັນແຫ່ງຄວາມສາມັກຄີ ອັນເປັນມູນເຊື້ອລະຫວ່າງປະຊາຊົນສາມປະເທດໃນອິນດູຈີນ, ແມ່ນການຮັດແໜ້ນສຳພັນທະພາບແບບປະຕິວັດຂອງສາມປະເທດອ້າຍນ້ອງ. ດຽວນີ້ ກຸ່ມສາມປະເທດອິນດູຈີນ ແມ່ນປ້ອມດ່ານໜ້າອັນໝັ້ນຄົງຂອງບັນດາກຳລັງສັນຕິພາບ ແລະ ສັງຄົມນິຍົມຢູ່ໃນອາຊີອາຄະເນ.

ຄວາມຮັກແພງ ແລະ ຮູ້ບຸນຄຸນຂອງປະຊາຊົນຫວຽດນາມຕໍ່ລຸງ ໂຮ່ ແມ່ນບໍ່ມີຂອບເຂດ. ເພີ່ມຍິ່ງຂຶ້ນຕະຫລອດໄປໃນພາລະກິດ ແລະ ຜົນສຳເລັດຂອງ ປະຊາຊົນຫວຽດນາມ ຜູ້ພິລະອາດຫານ. ຄຳສັ່ງສອນອັນສັກກາລະບໍ່ອາດຫລົງລືມໄດ້ຂອງປະທານໂຮ່ຈີມິນທີ່ວ່າ: "ບໍ່ມີສິ່ງໃດທີ່ປະເສີດກວ່າເອກະລາດ ອິດສະຫລະພາບ!" ຈົນຮອດຊຸ່ມນີ້ ພວມປຸກລະດົມຊາວຫວຽດນາມຫລາຍລ້ານຄົນ ສ້າງວິລະກຳອັນສະຫງ່າລາສີ ເພື່ອກຽດຂອງປະເທດຊາດສັງຄົມນິຍົມ.

ຄວາມຮູ້ສຶກຂອງນັກກອມມູນິດຫວຽດນາມ, ຂອງຊາວຜູ້ອອກແຮງງານຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເອກະພາບ ທີ່ມີຕໍ່ປະທານໂຮ່ຈີມິນ ໄດ້ຖືກສະແດງອອກຢ່າງຄົບຖ້ວນ ແລະ ເລິກເຊິ່ງໃນບົດລາຍງານການເມືອງທີ່ສະຫາຍ ເລຢວນ ເລຂາທິການໃຫຍ່ ຄະນະບໍລິຫານງານ ສູນກາງ ພັກກອມມູນິດຫວຽດນາມ ອ່ານຢູ່ທີ່ກອງປະຊຸມໃຫຍ່ຄັ້ງທີ 4 ຂອງພັກ ຊຶ່ງໄຂຂຶ້ນແຕ່ວັນທີ ໑໔ ເຖິງວັນທີ ໒໐ ເດືອນທັນ-ວາປີ ໑໙໗໖ ຢູ່ຮ່າໂນ້ຍ. ເມື່ອກ່າວຕໍ່ບັນດາຜູ້ແທນ ແລະ ແຂກທີ່ມາຮ່ວມກອງປະຊຸມ

ສະຫາຍ ເລຢວນ ເວົ້າວ່າ "ໃນວິນາທີ ອັນມີກຽດສະຫງ່ານີ້ ພວກເຮົາຂໍໄວ້ອາໄລຫາລຸງໂຮ່ ທີ່ເຄົາລົບຮັກ ຜູ້ທີ່ຈາກພວກເຮົາໄປແລ້ວ, ແຕ່ທົ່ວພັກ ທົ່ວປວງຊົນ ທົ່ວກອງທັບເຮົາ ເອກອ້າງທະນົງໃຈທີ່ສຸດ ທີ່ໄດ້ປະຕິບັດຕາມພິໄນກຳອັນສັກກາລະຂອງລຸງ ໃຫ້ເປັນຈິງຢ່າງສົມກຽດ. ຄວາມຝັນທີ່ຝັງໄວ້ຢູ່ໃນຫົວໃຈ ແລະ ຄຳຊີ້ນຳຂອງລຸງ ນັ້ນໄດ້ກາຍເປັນຄວາມຈິງ. ຈັກກະພັດອາເມລິກາ ໄດ້ປົບໜີອອກຈາກປະເທດເຮົາ ຢ່າງຕະຫລອດການ. ປະເທດຊາດເຮົາໄດ້ມີເອກະລາດ, ເອກະພາບ ຢ່າງສົມບູນ ແລະພວມກ້າວຂຶ້ນສັງຄົມນິຍົມ. ພີ່ນ້ອງຮ່ວມຊາດພາກໃຕ້ ພາກເໜືອໄດ້ເຕົ້າໂຮມ ຢູ່ໃນເຮືອນດຽວກັນ. ໂດຍສະແດງຄວາມຮູ້ສຶກ ອັນເລິກເຊິ່ງທີ່ສຸດ ຂອງພີ່ນ້ອງຮ່ວມຊາດ ແລະນັກຮົບທົ່ວປະເທດ ກອງປະຊຸມໃຫຍ່ຂໍອະນຸຍາດມອບໄຊຊະນະເໜືອ ອາເມລິກາຜູ້ຮຸກຮານໃຫ້ເປັນຂອງຂວັນແກ່ ປະທານໂຮ່ຈີມິນ ແລະ ຂໍສະແດງຄວາມຮູ້ບຸນຄຸນ ອັນບໍ່ມີຂອບເຂດຕໍ່ລຸງ ຜູ້ໄດ້ອຸທິດໝົດຊີວິດຂອງຕົນ ໃຫ້ແກ່ພາລະກິດປົດປ່ອຍປະຊາຊົນ ແລະທ້ອນໂຮມປະເທດຊາດໃຫ້ເປັນເອກະພາບກັນ, ໃຫ້ແກ່ພາລະກິດຂອງພັກ ແລະ ຂອງຊາດ, ເຮັດໃຫ້ດິນດອນຕ່ອນຫຍ້າ ບ້ານເກີດເມືອງນອນມີຊື່ສຽງ, ປະມູນມໍລະດົກ ອັນອຳມະຕະໄວ້ ໃຫ້ແກ່ພວກເຮົາ ແລະ ຄົນຮຸ່ນໃໝ່".

ບັນທຶກເຫດການສຳຄັນກ່ຽວກັບຊີວິດ ແລະ ການເຄື່ອນໄຫວ ຂອງປະທານ ໂຮ່ຈິມິນ

ວັນທີ ໑໙ ເດືອນ ພຶດສະພາ	– ຫງວຽນຊິງກຸງ (ໂຮ່ຈິມິນ) ກຳເນີດໃນຄອບຄົວຄູສອນຢູ່ຊົນນະບົດບ້ານ ຮ່ວາງຈູ່, ແຂວງເງ່ອານ.
ປີ ໑໙໐໕-໑໙໑໐	– ໄດ້ຮັບການສຶກສາຈາກວິທະຍາໄລແຫ່ງຊາດຢູ່ ເວ້ຊຶ່ງເປັນນະຄອນຫລວງຂອງເຈົ້າຊີວິດ ຫງວຽນ.
ປີ ໑໙໑໑-໑໙໑໗	– ເປັນຜູ້ຊ່ວຍພໍ່ຄົວໃນກຳປັ່ນໂດຍສານ ເດີນທາງໄກຂອງຝະລັ່ງ, ເປັນກຳມະກອນຕາມລະດູການ ຢູ່ຮາກແລມ (ນິວຢອກ, ອາເມລິກາ), ເຮັດວຽກອະນາໄມຢູ່ຕາມຖະໜົນ, ເປັນຜູ້ດັງເຕົາອາຍຂຸ່ນ ແລະ ເປັນຜູ້ຊ່ວຍພໍ່ຄົວຢູ່ ລອນດອນ, ເປັນຊ່າງຖ່າຍຮູບຢູ່ ປາຣີ.

ປີ ໑໙໑໙	- ເຂົ້າເປັນສະມາຊິກພັກສັງຄົມນິຍົມຝະລັ່ງ.
ເດືອນ ມັງກອນ ປີ ໑໙໑໙	- ໃສ່ຊື່ ຫງວຽນອາຍກວັກ, ເພິ່ນສົ່ງ "ສານທວງເອົາສິດຂອງປະຊາຊົນອານນາມ" ຊຶ່ງເປັນຖະແຫລງການການເມືອງສະບັບທຳອິດ ຂອງການປະຕິວັດປົດປ່ອຍຊາດຫວຽດນາມ ເຖິງສະມາພັນ ສາກົນຢູ່ ປາຣີ.
ເດືອນ ກໍລະກົດ ປີ ໑໙໒໐	- ເປັນເທື່ອທຳອິດທີ່ເພິ່ນໄດ້ອ່ານບົດນິພົນ ວ.ອີ.ເລນິນ: "ຮ່າງໂຄງການການເມືອງກ່ຽວກັບ ບັນຫາຊົນຊາດ ແລະ ບັນຫາເມືອງຂຶ້ນ", ແຕ່ນັ້ນມາຕັດສິນໃຈເຂົ້າຝ່າຍສາກົນກອມມູນິດ.
ເດືອນ ທັນວາ ປີ ໑໙໒໐	- ເຂົ້າຮ່ວມກອງປະຊຸມໃຫຍ່ຂອງນັກສັງຄົມນິຍົມ ຝະລັ່ງ; ນະທີ່ນີ້, ເພິ່ນລົງຄະແນນສຽງເຫັນດີ ນຳການສ້າງຕັ້ງພັກກອມມູນິດຝະລັ່ງ ແລະ ກາຍເປັນນັກກອມມູນິດຜູ້ທຳອິດໃນປະຫວັດສາດຫວຽດນາມ.
ເດືອນ ມິຖຸນາ ປີ ໑໙໒໔	- ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ 5 ຂອງສາກົນ - ກອມມູນິດ ຢູ່ມົດສະກູ ໃນຖານະເປັນຜູ້ ຕາງໜ້າອິນດູຈີນ.
ເດືອນ ມິຖຸນາ ປີ ໑໙໒໕	- ເປັນຜູ້ລິເລີ່ມສ້າງຕັ້ງ "ສະມາຄົມຊາວໜຸ່ມ ປະຕິວັດຫວຽດນາມ" ຊຶ່ງເປັນຕົ້ນກຳເນີດຂອງພັກກອມມູນິດຫວຽດນາມ.
ວັນທີ ໓ ເດືອນ ກຸມພາ ປີ ໑໙໓໐	- ເປັນປະທານກອງປະຊຸມເພື່ອເຕົ້າໂຮມຂອງບັນດານັກກອມມູນິດຫວຽດນາມຢູ່ຕົວເມືອງເກົາລູນ (ຮົງກົງ). ນະກອງປະຊຸມນີ້ ພັກກອມມູນິດຫວຽດນາມໄດ້ຮັບການສ້າງຕັ້ງຂຶ້ນ (ຕໍ່ມາປ່ຽນຊື່ເປັນ ພັກກອມມູນິດອິນດູຈີນ, ຕໍ່ຈາກນັ້ນເປັນພັກ ລົ້ງງານຫວຽດນາມ, ປະຈຸບັນແມ່ນພັກກອມມູນິດ ຫວຽດນາມ).

ແຕ່ເດືອນ ກໍລະກົດ ຫາເດືອນ ສິງຫາ ປີ ໑໙໓໕ – ເຂົ້າຮ່ວມວຽກງານຂອງກອງປະຊຸມໃຫຍ່ຄັ້ງທີ 7 ຂອງສາກົນກອມມູນິດ. ກອງປະຊຸມໃຫຍ່ໄດ້ຕົກລົງຮັບເອົາພັກກອມມູນິດອິນດູຈີນເຂົ້າໃນສາກົນກອມມູນິດ.

ວັນທີ ໘ ເດືອນ ກຸມພາ ປີ ໑໙໔໑ – ພາຍຫຼັງ ໓໐ ປີທີ່ພະເນຈອນຢູ່ຕ່າງປະເທດເພິ່ນໄດ້ກັບຄືນມາປະເທດຊາດ ໂດຍລັດອ້ອມຊາຍແດນຈີນ–ຫວຽດນາມ ຢູ່ເຂດປາກບໍ່ (ແຂວງກາວບັງ).

ປີ ໑໙໔໔–໑໙໔໕ – ນຳພາໂດຍກົງ ການກະກຽມລຸກຮື້ຂຶ້ນ ປະກອບອາວຸດທົ່ວປະເທດ. ໃນວັນທີ ໒໒ ເດືອນທັນວາ ປີ ໑໙໔໔ ເພິ່ນເຊັນຄຳສັ່ງຊີ້ນຳກ່ຽວກັບການສ້າງຕັ້ງ "ໜ່ວຍໂຄສະນາປະກອບອາວຸດ" ຊຶ່ງເປັນພື້ນຖານໃຫ້ແກ່ການສ້າງຕັ້ງກອງທັບປະຊາຊົນ ຫວຽດນາມ. ວັນທີ ໑໖ ເດືອນສິງຫາ ປີ ໑໙໔໕ ນຳພາກອງປະຊຸມໃຫຍ່ຂອງຜູ້ແທນປະຊາຊົນ ຫວຽດນາມຢູ່ ຕືນຈາວ. ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຮອງເອົາມະຕິໃຫ້ລຸກຮື້ຂຶ້ນທົ່ວປະເທດ. ໄດ້ຮັບເລືອກເປັນປະທານຄະນະກຳມະການປົດປ່ອຍຊາດ

ວັນທີ ໒ ເດືອນ ກັນຍາ ປີ ໑໙໔໕ – ຕາງໜ້າລັດຖະບານຊົ່ວຄາວຂອງສາທາລະນະລັດປະຊາທິປະໄຕ ຫວຽດນາມ ອ່ານຄຳປະກາດເອກະລາດຢູ່ສະໜາມຫຼວງບາດິງ (ຮ່າໂນ້ຍ), ທີ່ແຈ້ງການກຳເນີດຂອງລັດກຳມະກອນ ແລະ ຊາວນາລັດທຳອິດຢູ່ອາຊີອາຄະເນ.

ວັນທີ ໒ ເດືອນ ມີນາ ປີ ໑໙໔໖ – ໃນວາລະປະຊຸມເທື່ອທີໜຶ່ງ ຂອງສະພາແຫ່ງຊາດ ໄດ້ຖືກເລືອກເປັນປະທານປະເທດ ແລະ ຖືກແຕ່ງຕັ້ງເປັນນາຍົກລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ (ເປັນນາຍົກ ເຖິງ ປີ ໑໙໕໕).

ວັນທີ ໒໐ ເດືອນ ທັນວາ ປີ ໑໙໔໖	– ຜ່ານທາງວິທະຍຸກະຈາຍສຽງ, ຮຽກຮ້ອງ ໃຫ້ປະຊາຊົນຫວຽດນາມລຸກຂຶ້ນຮັດສົງຄາມຕໍ່ຕ້ານ ພວກລ່າເມືອງຂຶ້ນຝະລັ່ງ ທີ່ພວມຊອກວິທີໃຊ້ກຳລັງ ອາວຸດສ້າງແອກຄອບຄອງຄືນໃໝ່ໃນປະເທດ ຫວຽດນາມ.
ເດືອນ ກັນຍາ ປີ ໑໙໕໐	– ຊີ້ນຳໂດຍກົງໃນຂັ້ນຮົບເພື່ອປົດປ່ອຍ ບັນດາແຂວງພາກເໜືອ ຂັ້ນຮົບໄດ້ຮັບໄຊຊະນະ, ສາຍພົວພັນໂດຍກົງລະຫວ່າງສາທາລະນະລັດ ປະຊາທິປະໄຕຫວຽດນາມ ກັບສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອື່ນໆ ໄດ້ຮັບການສ້າງຕັ້ງຂຶ້ນ.
ເດືອນ ກຸມພາ ປີ ໑໙໕໑	– ສະເໜີບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ 2 ຂອງພັກກອມມູນິດອິນດູຈີນ, ກອງປະຊຸມໃຫຍ່ຮັບຮອງເອົາມະຕິປ່ຽນຊື່ພັກເປັນພັກ ຄົນງານຫວຽດນາມ, ຮຽກຮ້ອງໃຫ້ທົ່ວພັກ,ທົ່ວປວງຊົນລະດົມຄວາມສາມາດ, ວັດຖຸເຫື່ອແຮງ ຍູ້ແຮງ ສົງຄາມຕໍ່ຕ້ານຈົນເຖິງໄຊຊະນະ. ນະກອງປະຊຸມໃຫຍ່ຄັ້ງນີ້ ເພິ່ນໄດ້ຮັບເລືອກເປັນປະທານ ຄະນະບໍລິຫານງານສູນກາງພັກຄົນງານຫວຽດນາມ.
ວັນທີ ໒໑ ເດືອນ ກໍລະກົດ ປີ ໑໙໕໔	– ສົ່ງຄຳຮຽກຮ້ອງເນື່ອງໃນໂອກາດເຊັນສັນຍາ ເຈີແນວ ແລະ ຟື້ນຟູສັນຕິພາບຢູ່ໃນອິນດູຈີນ.
ເດືອນ ມິຖຸນາ ປີ ໑໙໕໕	– ນຳພາຄະນະຜູ້ແທນພັກ ແລະ ລັດສາທາລະນະລັດປະຊາທິປະໄຕ ຫວຽດນາມ ຢ້ຽມຢາມມິດຕະພາບສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອື່ນໆ.
ເດືອນ ກັນຍາ ປີ ໑໙໖໐	– ນຳພາກອງປະຊຸມໃຫຍ່ຄັ້ງທີ 3 ຂອງພັກ ຄົນງານຫວຽດນາມ, ກອງປະຊຸມໃຫຍ່ໄດ້ຍົກສອງໜ້າທີ່ຍຸດທະສາດຂອງການປະຕິວັດຫວຽດນາມໃນໄລຍະ

ໃໝ່ຂຶ້ນ: ກໍ່ສ້າງສັງຄົມນິຍົມຢູ່ພາກເໜືອແລະປົດປ່ອຍພາກໃຕ້ອອກຈາກແອກປົກຄອງ ຂອງພວກຈັກກະພັດ ແລະ ລູກມືຂອງພວກເຂົາ, ເຮັດໃຫ້ ປະເທດມີເອກະພາບ, ມີສັນຕິພາບ. ໄດ້ຖືກເລືອກ-ໃຫ້ເປັນປະທານຄະນະບໍລິຫານງານສູນກາງພັກຄົນງານຫວຽດນາມອີກເທື່ອໜຶ່ງ.

ເດືອນເມສາ ປີ ໑໙໖໕ – ຖືກເລືອກເປັນປະທານສະພາປ້ອງກັນຊາດ ສູງສຸດຂອງສາທາລະນະລັດ ປະຊາທິປະໄຕ ຫວຽດນາມຢູ່ໃນສະໄໝປະຊຸມສະພາແຫ່ງຊາດ, ສົ່ງຄຳຮຽກຮ້ອງ: "ທຸກສິ່ງທຸກຢ່າງ ເພື່ອການຕໍ່ສູ້ຕ້ານອາເມລິກາ, ເພື່ອກອບກູ້ປະເທດຊາດ!"

ວັນທີ ໒ ເດືອນກັນຍາ ປີ ໑໙໖໙ – ສະຫາຍໂຮ່ຈີມິນ ປະທານຄະນະບໍລິຫານງານ ສູນກາງພັກຄົນງານຫວຽດນາມ, ປະທານປະເທດສາທາລະນະລັດ ປະຊາທິປະໄຕ ຫວຽດນາມໄດ້ເຖິງແກ່ມໍລະນະກຳຢູ່ໃນເຮືອນຂອງຕົນທີ່ຮ່າໂນ້ຍ ຍ້ອນໂລກຫົວໃຈ. ວັນທີ ໒໙ ເດືອນພະຈິກປີ ໑໙໖໙, ກົມການເມືອງສູນກາງພັກຄົນງານຫວຽດນາມ ໄດ້ມີມະຕິຕົກລົງເກັບຮັກສາສົບຂອງປະທານ ໂຮ່ຈີມິນໄວ້ ແລະ ສ້າງສຸສານຂອງປະທານໂຮ່ຈີມິນ. ແຕ່ວັນທີ ໒໙ ເດືອນສິງຫາ ປີ ໑໙໗໕, ປະທານໂຮ່ຈີມິນ ພັກຜ່ອນຢ່າງສະຫງົບໃນສຸສານ ຊຶ່ງສ້າງຂຶ້ນຢູ່ສະໜາມຫລວງບາດິງ.

ສາລະບານ

ໜ້າ

"ພວກຂ້ອຍແມ່ນຄົນພື້ນຖານ ເງອ່ານ!" 7

ຄິດເຖິງອິດສະຫລະພາບ 15

ຄົນຮັກຊາດ 45

ດາບວິເສດ 75

ນັກກອມມູນິດ 90

ບົນດິນແດນຂອງຜູ້ເບີກທາງ 108

ຢູ່ຂອບຟ້າເບື້ອງນັ້ນແມ່ນປະເທດຊາດ 140

ການກຳເນີດຂອງພັກ 168

ຖືກຈັບເທື່ອທຳອິດ 186

ບ້ານເກີດເມືອງນອນແຫ່ງທີສອງ 210

ຊາວບ້ານປ່າ 229

ເວລາຖືກຄຸມຂັງ 264

ພາຍຸລົມແດງປະຕິວັດ 278

ບາດກ້າວເດີນທຳອິດຂອງສາທາລະນະລັດ 319

ໃນວົງປິດລ້ອມຂອງສັດຕູ 338

ສົງຄາມ 366

ການຕໍ່ສູ້ຄັ້ງໃຫຍ່ 396

ຊື່ສຽງ ແລະ ພາລະກິດຂອງເພີ່ນຍິ່ງຍົງຕະຫລອດການ 419

ບັນທຶກເຫດການສຳຄັນກ່ຽວກັບຊີວິດ ແລະ ການເຄື່ອນໄຫວຂອງປະທານ ໂຮ່ຈີ
ມິນ 427